# ພຣະໄຕຣປິດົກພາສາລາວ

ແປແລະຮຽບຮຽງຈາກ ສະບັບມຫາຈຸຣາລົງກອນຣາຊວິທຍາລັຍ ໔໕ ເຫລັ້ມ (ປົກສີຟ້າ)

## ພຣະໄຕຣປິດົກເຫລັ້ມທີ ໐໑ ວິນັຍປິດົກທີ ໐໑ ມຫາວິພັງຄ໌ ພາຄ ໑

## ພຣະວິນັຍປິດົກ ມຫາວິພັງຄ໌ ເວຣັຍຊກັນຫ໌

## ພຣະວິນັຍປິດົກ

## ມຫາວິພັງຄ໌ ພາຄ ໑

□ □ □ □

ຂໍນອບນ້ອມພຣະຜູ້ມີພຣະພາຄອຣຫັນຕສັມມາສັມພຸທທເຈົ້າພຣະອົງຄ໌ນັ້ນ

## ເວຣັຍຊກັນຫ໌

### ເຣື້ອງເວຣັຍຊພຣາມນ໌

[໑] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ຄວງຕົ້ນກະເດົາ ອັນເປັນທີ່ຢູ່ຂອງນເຣຣຸຍັກສ໌ ເຂຕເມືອງເວຣັຍຊາ ພ້ອມກັບພິກສຸສົງຂ໌ຫມູ່ໃຫຍ່ປະມານ ໕໐໐ ຮູບ ເວຣັຍຊພຣາມນ໌ໄດ້ຟັງຂ່າວວ່າ ທ່ານພຣະສມນະໂຄດົມ ເປັນສາກຍບຸຕຣ ສເດັຈອອກຜນວຊ ຈາກສາກຍຕະກູນ ປະທັບຢູ່ ນະ ຄວງຕົ້ນກະເດົາ ອັນເປັນທີ່ຢູ່ຂອງນເຣຣຸຍັກສ໌ ເຂຕເມືອງ ເວຣັຍຊາ ພ້ອມກັບພິກສຸສົງຂ໌ຫມູ່ໃຫຍ່ປະມານ ໕໐໐ ຮູບ ທ່ານພຣະໂຄດົມຜູ້ຈະເຣີນນັ້ນ ມີກິຕຕິສັພທ໌ອັນງາມແຜ່ໄປຢ່າງນີ້ ແມ່ນເພາະເຫຕຸວ່າ ພຣະຜູ້ມີພຣະພາຄ ພຣະອົງຄ໌ນັ້ນ ເປັນພຣະອຣຫັນຕ໌ ຕຣັສຣູ້ດ້ວຍພຣະອົງຄ໌ເອງໂດຍຊອບ ພຽບພ້ອມດ້ວຍວິຊຊາແລະຈຣນະ ສເດັຈໄປດີ ຮູ້ແຈ້ງໂລກ ເປັນສາຣຖີຝຶກຜູ້ທີ່ຄວຣຝຶກໄດ້ຢ່າງຍອດຍ້ຽມ ເປັນສາສດາຂອງເທວດາແລະມນຸສຍ໌ທັງຫລາຍ ເປັນພຣະພຸທທເຈົ້າ ເປັນພຣະຜູ້ມີພຣະພາຄ ພຣະອົງຄ໌ຊົງຮູ້ແຈ້ງໂລກນີ້ພ້ອມທັງເທວໂລກ ມາຣໂລກ ພຣົມໂລກແລະຫມູ່ສັຕວ໌ ພ້ອມທັງສມນະພຣາມນ໌ ເທວດາແລະມນຸສຍ໌ ດ້ວຍພຣະອົງຄ໌ເອງ ແລ້ວຈຶ່ງຊົງປະກາດໃຫ້ຜູ້ອື່ນຮູ້ນຳ ຊົງສະແດງທັມມີຄວາມງາມໃນເບື້ອງຕົ້ນ ມີຄວາມງາມໃນທ່າມກາງແລະມີຄວາມງາມໃນທີ່ສຸດ ຊົງປະກາດພຣົມຈັນຍ໌ ພ້ອມທັງອັນຖະແລະພຍັນຊນະ ບໍຣິສຸດທ໌ບໍຣິບູຣນ໌ຄົບຖ້ວນ ກາຣໄດ້ພົບພຣະອຣຫັນຕ໌ທັງຫລາຍເຊັ່ນນີ້ ເປັນຄວາມດີຢ່າງແທ້ຈິງ

ເວຣັຍຊພຣາມນ໌ກ່າວຕຳຫນິພຣະຜູ້ມີພຣະພາຄ

[໒] ຕໍ່ມາ ເວຣັຍຊພຣາມນ໌ເດີນທາງໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ໄດ້ສົນທນາປາສັຍກັບພຣະຜູ້ມີພຣະພາຄພໍເປັນທີ່ບັນເທີງໃຈ ພໍເປັນທີ່ຣະນຶກເຖິງກັນແລະກັນ ແລ້ວນັ່ງ ນະທີ່ສົມຄວຣ ຂາບທູລວ່າ "ທ່ານພຣະໂຄດົມ ຂ້າພະເຈົ້າໄດ້ຊາບມາວ່າ ພຣະສມນະໂຄດົມບໍ່ຍອມໄຫວ້ ບໍ່ລຸກຮັບພວກ ພຣາມນ໌ຜູ້ແກ່ ຜູ້ເຖົ້າ ຜູ້ໃຫຍ່ ຜູ້ລ່ວງກາລຜ່ານວັຍ ຫລືບໍ່ເຊື້ອເຊີນໃຫ້ນັ່ງເຣື່ອງທີ່ຂ້າພະເຈົ້າໄດ້ຊາບມານັ້ນເປັນຈິງແທ້ ການທີ່ທ່ານພຣະໂຄດົມ ເຮັດແບບນັ້ນບໍ່ສົມຄວຣເລີຍ" ພຣະຜູ້ມີພຣະພາຄຕຣັສຕອບວ່າ "ພຣາມນ໌ ເຮົາຍັງບໍ່ເຫັນໃຜບໍ່ວ່າໃນໂລກໃດໆ ໃນບໍຣິສັດໃດໆ ທີ່ເຮົາຄວຣຈະໄຫວ້ ລຸກຮັບຫລືເຊື້ອເຊີນໃຫ້ນັ່ງ ເພາະວ່າຕຖາຄົຕໄຫວ້ ລຸກຮັບຫລືເຊື້ອເຊີນຜູ້ໃດໃຫ້ນັ່ງ ສີສະຂອງຜູ້ນັ້ນຈະຕ້ອງຂາດ ຕົກໄປ"

[໓] ພຣາມນ໌ຂາບທູລຕໍ່ໄປວ່າ "ທ່ານພຣະໂຄດົມ ເປັນຄົນບໍ່ມີຣົສ" ພຣະຜູ້ມີພຣະພາຄຕຣັສຕອບວ່າ "ພຣາມນ໌ ຂໍ້ທີ່ເຂົາກ່າວຫາເຮົານັ້ນມີມູລຢູ່ ເພາະຕຖາຄົຕ ລະຣົສ ຄື ຮູບ ສຽງ ກິ່ນ ຣົສໂຜຕຖັພພະໄດ້ຫມົດສິ້ນ ຕັດຮາກເຫງົ້າ ຄືກັບຕົ້ນຕານທີ່ຖືກຕັດຮາກເຫງົ້າໄປແລ້ວເຫລືອແຕ່ພື້ນທີ່ເຮັດໃຫ້ບໍ່ມີ ເກີດຂຶ້ນຕໍ່ໄປບໍ່ໄດ້ ຂໍ້ທີ່ເຂົາກ່າວຫາເຮົານັ້ນມີມູລຢູ່ ແຕ່ບໍ່ແມ່ນທີ່ທ່ານກ່າວເຖິງ"

[໔] ພຣາມນ໌ຂາບທູລຕໍ່ໄປວ່າ "ທ່ານພຣະໂຄດົມ ເປັນຄົນບໍ່ມີສົມບັຕ" ພຣະຜູ້ມີພຣະພາຄຕຣັສຕອບວ່າ "ພຣາມນ໌ ຂໍ້ທີ່ເຂົາກ່າວຫາເຮົານັ້ນມີມູລຢູ່ ເພາະຕຖາຄົຕ ລະສົມບັຕຄື ຮູບ ສຽງ ກິ່ນ ຣົສໂຜຕ ຖັພພະ ໄດ້ຫມົດສິ້ນ ຕັດຮາກເຫງົ້າ ຄືກັບຕົ້ນຕານທີ່ຖືກຕັດຮາກເຫງົ້າໄປແລ້ວເຫລືອແຕ່ພື້ນທີ່ ເຮັດໃຫ້ບໍ່ມີ ເກີດຂຶ້ນຕໍ່ໄປບໍ່ໄດ້ ຂໍ້ທີ່ເຂົາກ່າວຫາເຮົານັ້ນມີມູລຢູ່ ແຕ່ບໍ່ແມ່ນທີ່ທ່ານກ່າວເຖິງ"

[໕] ພຣາມນ໌ຂາບທູລຕໍ່ໄປວ່າ "ທ່ານພຣະໂຄດົມ ສອນບໍ່ໃຫ້ກະທຳ" ພຣະຜູ້ມີພຣະພາຄຕຣັສຕອບວ່າ "ພຣາມນ໌ ຂໍ້ທີ່ເຂົາກ່າວຫາເຮົານັ້ນມີມູລຢູ່ ເພາະເຮົາສອນບໍ່ໃຫ້ກະທຳກາຍທຸຈຣິຕ ວຈີທຸຈຣິຕ ມໂນທຸຈຣິຕ ຕລອດເຖິງການບໍ່ໃຫ້ກະທຳບາບ ອກຸສົລທັມຕ່າງໆ ຂໍ້ທີ່ເຂົາກ່າວຫາເຮົານັ້ນມີມູລຢູ່ ແຕ່ບໍ່ແມ່ນທີ່ທ່ານກ່າວເຖິງ"

[໖] ພຣາມນ໌ຂາບທູລຕໍ່ໄປວ່າ "ທ່ານພຣະໂຄດົມ ສອນໃຫ້ທຳລາຍ" ພຣະຜູ້ມີພຣະພາຄຕຣັສຕອບວ່າ "ພຣາມນ໌ ຂໍ້ທີ່ເຂົາກ່າວຫາເຮົານັ້ນມີມູລຢູ່ ເພາະເຮົາສອນໃຫ້ທຳລາຍຣາຄະ ໂທສະໂມຫະ ຕລອດເຖິງໃຫ້ທຳລາຍບາບອກຸສົລທັມຕ່າງໆ ຂໍ້ທີ່ເຂົາກ່າວຫາເຮົານັ້ນມີມູລຢູ່ ແຕ່ບໍ່ແມ່ນທີ່ທ່ານກ່າວເຖິງ"

[໗] ພຣາມນ໌ຂາບທູລຕໍ່ໄປວ່າ "ທ່ານພຣະໂຄດົມ ເປັນຄົນຊັງກຽດຊັງ" ພຣະຜູ້ມີພຣະພາຄຕຣັສຕອບວ່າ "ພຣາມນ໌ ຂໍ້ທີ່ເຂົາກ່າວຫາເຮົານັ້ນມີມູລຢູ່ ເພາະເຮົາຊັງກຽດຊັງກາຍທຸຈຣິຕ ວຈີທຸຈຣິຕ

ມໂນທຸຈຣິຕ ແລະບາບອກຸຨົລຘັມຕ່າງໆ ຂໍ້ທີ່ເຂົາກ່າວຫາເຮົານັ້ນມີມູລຢູ່ ແຕ່ບໍ່ແມ່ນທີ່ທ່ານກ່າວເຖິງ”

[໘] ພຣາມຓ໌ຂາບທູລຕໍ່ໄປວ່າ “ທ່ານພຣະໂຄດົມ ເປັນຄົນຊ່າງກຳຈັດ” ພຣະຜູ້ມີພຣະຠາຄຕັສຕອບວ່າ “ພຣາມຓ໌ ຂໍ້ທີ່ເຂົາກ່າວຫາເຮົານັ້ນມີມູລຢູ່ ເພາະເຮົາສະແດງຘັມເພື່ອກຳຈັດຣາຄະ ໂທສະ ໂມຫະ ແລະບາບອກຸຨົລຘັມຕ່າງໆ ຂໍ້ທີ່ເຂົາກ່າວຫາເຮົານັ້ນມີມູລຢູ່ ແຕ່ບໍ່ແມ່ນທີ່ທ່ານກ່າວເຖິງ”

[໙] ພຣາມຓ໌ຂາບທູລຕໍ່ໄປວ່າ “ທ່ານພຣະໂຄດົມ ເປັນຄົນຊ່າງເຜົາຜານ” ພຣະຜູ້ມີພຣະຠາຄຕັສຕອບວ່າ “ພຣາມຓ໌ ຂໍ້ທີ່ເຂົາກ່າວຫາເຮົານັ້ນມີມູລຢູ່ ເພາະເຮົາກ່າວເຖິງບາບອກຸຨົລຘັມທັງຫລາຍ ຄືກາຍທຸຈຣິຕ ວຈີທຸຈຣິຕ ມໂນທຸຈຣິຕ ວ່າເປັນສິ່ງທີ່ຄວຣເຜົາຜານ ພຣາມຓ໌ ເຮົາຮຽກຄົນ ທີ່ລະບາບ ອກຸຨົລຘັມທັງຫລາຍທີ່ຄວຣເຜົາຜານ ຕັດຮາກເຫງົ້າຄືກັບຕົ້ນຕານທີ່ຖືກຕັດຮາກເຫງົ້າໄປແລ້ວເຫລືອແຕ່ພື້ນທີ່ ເຮັດໃຫ້ບໍ່ມີ ເກີດຂຶ້ນຕໍ່ໄປບໍ່ໄດ້ ວ່າເປັນຄົນຊ່າງເຜົາຜານ ຕຖາຄົຕລະບາບອກຸຨົລຘັມຕ່າງໆ ທີ່ຄວຣເຜົາຜານໄດ້ຫມົດສິ້ນ ຂໍ້ທີ່ເຂົາກ່າວຫາເຮົານັ້ນມີມູລຢູ່ ແຕ່ບໍ່ແມ່ນທີ່ທ່ານກ່າວເຖິງ”

[໑໐] ພຣາມຓ໌ຂາບທູລຕໍ່ໄປວ່າ “ທ່ານພຣະໂຄດົມ ເປັນຄົນບໍ່ຜຸດບໍ່ເກີດ” ພຣະຜູ້ມີພຣະຠາຄຕັສຕອບວ່າ “ພຣາມຓ໌ ຂໍ້ທີ່ເຂົາກ່າວຫາເຮົານັ້ນມີມູລຢູ່ ເພາະເຮົາຮຽກຄົນທີ່ລະການຢູ່ໃນຄັນຠ໌ແລະການເກີດໃຫມ່ໄດ້ຫມົດ ຕັດຮາກເຫງົ້າຄືກັບຕົ້ນຕານທີ່ຖືກຕັດຮາກເຫງົ້າໄປແລ້ວເຫລືອແຕ່ພື້ນທີ່ ເຮັດໃຫ້ບໍ່ມີ ເກີດຂຶ້ນຕໍ່ໄປບໍ່ໄດ້ວ່າ ເປັນຄົນບໍ່ຜຸດບໍ່ເກີດ ຕຖາຄົຕລະການຢູ່ໃນຄັນຠ໌ແລະການເກີດໃຫມ່ໄດ້ຫມົດສິ້ນແລ້ວ ຂໍ້ທີ່ເຂົາກ່າວຫາເຮົານັ້ນມີມູລຢູ່ ແຕ່ບໍ່ແມ່ນທີ່ທ່ານກ່າວເຖິງ”

ຊົງອຸປມາດ້ວຍລູກໄກ່

[໑໑] “ພຣາມຓ໌ ໄຂ່ ໘ ຫນ່ວຍ ໑໐ ຫນ່ວຍ ຫລື ໑໒ ຫນ່ວຍ ທີ່ແມ່ໄກ່ຟັກດີແລ້ວ ລູກໄກ່ໂຕທີ່ໃຊ້ເລັບຫລືປາຍສົບທຳລາຍປົ້ໄຂ່ອອກມາໄດ້ກ່ອນ ຄວຣຮຽກມັນວ່າ ເປັນໂຕອ້າຍຫລືໂຕນ້ອງ” “ຄວຣຮຽກວ່າ ອ້າຍ ເພາະມັນແກ່ກວ່າເຂົາ” “ເຊັ່ນດຽວກັນນັ້ນແຫລະພຣາມຓ໌ ໃນຂຓະທີ່ຫມູ່ສັຕວ໌ ຖືກປົ້ໄຂ່ຄືອວິຊຊາຫໍ່ຫຸ້ມຢູ່ ເຮົາໄດ້ທຳລາຍປົ້ໄຂ່ຄືອວິຊຊາຜູ້ດຽວເທົ່ານັ້ນ ສຳເຣັຈອນຸຕຕຣສັມມາສັມໂພຘິຢາຓ ອັນຍອດຍ້ຽມ ຈຶ່ງເປັນອ້າຍໃຫຍ່ຜູ້ປະເສີດທີ່ສຸດຂອງໂລກ

ຌານ ໔

ພຣາມຓ໌ ເຮົາປາຣົຠຄວາມພຽນ ບໍ່ຍ່ອນຍານ ມີສຕິຕັ້ງຫມັ້ນ ບໍ່ຫລົງລືມ ມີກາຍສງົບ ບໍ່ຮ້ອນຮົນ ມີຈິຕແນ່ວແນ່ເປັນສມາຘິ

ປຐົມຌານ

ເຮົາສງັດຈາກກາມແລະອກຸສົລທັມທັງຫລາຍແລ້ວ ບັນລຸປຖົມຍານທີ່ມີວິຕົກ ວິຈາຣປີຕິ ແລະສຸຂ
ອັນເກີດຈາກວິເວກຢູ່

ທຸຕິຍຍານ

ເພາະວິຕົກ ວິຈາຣສງົບຣະງັບໄປແລ້ວ ເຮົາບັນລຸທຸຕິຍຍານ ມີຄວາມຜ່ອງໃສພາຍໃນ ມີພາວະທີ່ຈິຕເປັນນຶ່ງຜຸດຂຶ້ນ ບໍ່ມີວິຕົກບໍ່ມີວິຈາຣ ມີແຕ່ປີຕິແລະສຸຂອັນເກີດຈາກສມາທິເທົ່ານັ້ນຢູ່

ຕຕິຍຍານ

ເພາະປີຕິຈາງຫາຍໄປແລ້ວ ເຮົາມີອຸເບກຂາ ມີສຕິສັມປຊັຍຍະ ສເວີຍສຸຂດ້ວຍນາມກາຍ ໄດ້ບັນລຸຕຕິຍຍານທີ່ພຣະອຣິຍະທັງຫລາຍສັຣເສີນວ່າ ຜູ້ມີອຸເບກຂາ ມີສຕິ ຢູ່ເປັນສຸຂ

ຈຕຸຕຖຍານ

ເພາະລະສຸຂແລະທຸກຂ໌ໄດ້ແລ້ວ ເພາະໂສມນັສແລະໂທມນັສດັບໄປກ່ອນແລ້ວ ເຮົາໄດ້ບັນລຸຈຕຸຕຖຍານທີ່ບໍ່ມີທຸກຂ໌ ບໍ່ມີສຸຂ ມີສຕິບໍຣິສຸດທ໌ເພາະອຸເບກຂາຢູ່”

ວິຊຊາ ໑

ປຸພເພນິວາສານຸສຕິຍານ

[໑໔] “ເມື່ອຈິຕເປັນສມາທິ ບໍຣິສຸດທ໌ຜຸດຜ່ອງ ບໍ່ມີກິເລສພຽງດັ່ງເນີນ ປາສຈາກຄວາມເສົ້າຫມອງອ່ອນ ເຫມາະແກ່ກາຣໃຊ້ງານ ຕັ້ງຫມັ້ນ ບໍ່ຫວັ່ນໄຫວຢ່າງນີ້ ເຮົານັ້ນ ໄດ້ນ້ອມຈິຕໄປເພື່ອປຸພເພນິວາສານຸສຕິຍານ ຣະນຶກຊາຕິກ່ອນໄດ້ຫລາຍຊາຕິ ຄື ໑ ຊາຕິແດ່ ໒ ຊາຕິແດ່ ໓ ຊາຕິແດ່ ໔ ຊາຕິແດ່ ໕ ຊາຕິແດ່ ໑໐ ຊາຕິແດ່ ໒໐ ຊາຕິແດ່ ໓໐ ຊາຕິແດ່ ໔໐ ຊາຕິແດ່ ໕໐ ຊາຕິແດ່ ໑໐໐ ຊາຕິແດ່ ໑,໐໐໐ ຊາຕິແດ່ ໑໐,໐໐໐ ຊາຕິແດ່ ຕລອດສັງວັຕຕກັປແດ່ ຕລອດວິວັຕຕກັປແດ່ ຕລອດສັງວັຕຕກັປແລະວິວັຕຕກັປແດ່ ຫລາຍກັປວ່າ ໃນພົພພຸ້ນ ເຮົາມີຊື່ຢ່າງນັ້ນ ມີຕະກູນ ມີວັນນະ ມີອາຫາຣສເວີຍສຸຂທຸກຂ໌ ແລະມີອາຍຸຢ່າງນັ້ນໆ ຈຸຕິຈາກພົພນັ້ນກໍໄປເກີດໃນພົພພຸ້ນ ມີຊື່ ມີຕະກູນ ມີວັນນະ ມີອາຫາຣ ສເວີຍສຸຂທຸກຂ໌ ແລະມີອາຍຸຢ່າງນັ້ນໆ ຈຸຕິຈາກພົພນັ້ນຈຶ່ງມາເກີດໃນພົພນີ້ ເຮົາຣະນຶກຊາຕິກ່ອນໄດ້ຫລາຍຊາຕິ ພ້ອມທັງລັກສນະທົ່ວໄປ ແລະຊີວປວັຕຕິຢ່າງນີ້ ພຣາມນ໌ ເຮົາໄດ້ບັນລຸວິຊຊາທີ ໑ ໃນຍາມແຣກແຫ່ງຣາຕຣີ ຄວາມມືດມິດຄື ອວິຊຊາ ເຮົາກໍາຈັດໄດ້ແລ້ວ ແສງສວ່າງຄືວິຊຊາໄດ້ເກີດຂຶ້ນແກ່ເຮົາ ປຽບເຫມືອນແສງສວ່າງເກີດຂຶ້ນແກ່ບຸຄຄົລຜູ້ບໍ່

ປມາດ ມີຄວາມພຽນ ອຸທິສູກາຍແລະໃຈ ພຣາມນ໌ ນີ້ຄືການເຈາະປົ້ໄຂ່ຄືອວິຊຊາອອກມາຄັ້ງທີ ໑ ຂອງເຮົາ ເຫມືອນການເຈາະອອກຈາກປົ້ໄຂ່ຂອງລູກໄກ່"

## ຈຸຕູປປາຕຍານ

[໑໓] "ເມື່ອຈິຕເປັນສມາທິ ບໍຣິສຸດທ໌ຜຸດຜ່ອງ ບໍ່ມີກິເລສພຽງດັ່ງເນີນ ປາສຈາກຄວາມເສົ້າຫມອງ ອ່ອນ ເຫມາະແກ່ການໃຊ້ງານ ຕັ້ງຫມັ້ນບໍ່ຫວັ່ນໄຫວຢ່າງນີ້ ເຮົານັ້ນໄດ້ນ້ອມຈິຕໄປເພື່ອ ຈຸຕູປປາຕຍານ ເຫັນຫມູ່ສັຕວ໌ຜູ້ກຳລັງຈຸຕິ ກຳລັງອຸບັຕິ ທັງຊັ້ນຕ່ຳແລະຊັ້ນສູງ ງາມແລະບໍ່ງາມເກີດ ດີແລະບໍ່ດີ ດ້ວຍຕາທິພຍ໌ອັນບໍຣິສຸດທ໌ເຫນືອມນຸສຍ໌ ເຮົາຮູ້ແຈ້ງເຖິງຫມູ່ສັຕວ໌ຜູ້ເປັນໄປຕາມກັມວ່າ ສັຕວ໌ທີ່ປະກອບກາຍທຸຈຣິຕ ວຈີທຸຈຣິຕ ມໂນທຸຈຣິຕ ກ່າວຮ້າຍພຣະອຣິຍະ ມີຄວາມເຫັນຜິດ ແລະຊັກຊວນຜູ້ອື່ນໃຫ້ທຳກັມຕາມຄວາມເຫັນຜິດ ພວກເຂົາຫລັງຈາກຕາຍ ແລ້ວຈະໄປບັງເກີດໃນ ອບາຍ ທຸຄຕິ ວິນິບາຕ ນຣົກ ແຕ່ຫມູ່ສັຕວ໌ທີ່ປະກອບກາຍສຸຈຣິຕ ວຈີສຸຈຣິຕ ມໂນສຸຈຣິຕ ບໍ່ກ່າວ ຮ້າຍພຣະອຣິຍະ ມີຄວາມເຫັນຊອບ ຊັກຊວນຜູ້ອື່ນໃຫ້ທຳກັມຕາມຄວາມເຫັນຊອບ ພວກເຂົາ ຫລັງຈາກຕາຍແລ້ວ ຈະໄປບັງເກີດໃນສຸຄຕິໂລກສວັນຄ໌ ພຣາມນ໌ ເຮົາໄດ້ບັນລຸວິຊຊາທີ ໒ ໃນ ຍາມທີ ໒ ແຫ່ງຣາຕຣີ ຄວາມມືດມິດຄື ອວິຊຊາ ເຮົາກຳຈັດໄດ້ແລ້ວ ແສງສວ່າງຄືວິຊຊາໄດ້ເກີດ ຂຶ້ນແກ່ເຮົາ ປຽບເຫມືອນແສງສວ່າງ ເກີດແກ່ບຸຄຄົລຜູ້ບໍ່ປມາດ ມີຄວາມພຽນ ອຸທິສູກາຍແລະໃຈ ພຣາມນ໌ ນີ້ຄືການເຈາະປົ້ໄຂ່ຄືອວິຊຊາອອກມາຄັ້ງທີ ໒ ຂອງເຮົາ ເຫມືອນການເຈາະອອກຈາກປົ້ ໄຂ່ຂອງລູກໄກ່"

## ອາສວັກຂຍຍານ

[໑໔] "ເມື່ອຈິຕເປັນສມາທິ ບໍຣິສຸດທ໌ຜຸດຜ່ອງ ບໍ່ມີກິເລສພຽງດັ່ງເນີນ ປາສຈາກຄວາມເສົ້າຫມອງ ອ່ອນ ເຫມາະແກ່ການໃຊ້ງານ ຕັ້ງຫມັ້ນ ບໍ່ຫວັ່ນໄຫວຢ່າງນີ້ ເຮົານັ້ນໄດ້ນ້ອມຈິຕໄປເພື່ອອາສ ວັກຂຍຍານ ໄດ້ຮູ້ແຈ້ງຕາມຄວາມເປັນຈິງວ່າ ນີ້ທຸກຂ໌ ນີ້ທຸກຂສມຸທັຍ ນີ້ທຸກຂນິໂຣທ ນີ້ທຸກຂນິ ໂຣທຄາມີນີປຕິປທາ ນີ້ອາສວະ ນີ້ອາສວສມຸທັຍ ນີ້ອາສວນິໂຣທ ນີ້ອາສວນິໂຣທຄາມີນີປຕິປທາ ເມື່ອເຮົາຮູ້ເຫັນຢູ່ ຢ່າງນີ້ ຈິຕໄດ້ຫລຸດພົ້ນຈາກກາມາສວະ ພວາສວະ ອວິຊຊາສວະ ເມື່ອຈິຕ ຫລຸດພົ້ນແລ້ວ ກໍຮູ້ວ່າ ຫລຸດ ພົ້ນແລ້ວ ຮູ້ແຈ້ງວ່າ ຊາຕິສິ້ນແລ້ວ ຢູ່ຈົບພຣົມຈັນຍ໌ແລ້ວ ທຳກິຈທີ່

ຄວຣທຳສຳເຣັດແລ້ວ ບໍ່ມີກິຈອື່ນເພື່ອຄວາມເປັນຢ່າງນີ້ອີກຕໍ່ໄປ ພຣາມນ໌ ເຮົາໄດ້ບັນລຸວິຊຊາທີ ໓ ໃນຍາມທີ ໓ ແຫ່ງຣາຕຣີ ຄວາມມືດມິດຄື ອວິຊຊາເຮົາກຳຈັດໄດ້ແລ້ວ ແສງສວ່າງຄືວິຊຊາໄດ້ເກີດຂຶ້ນແກ່ເຮົາ ປຽບເຫມືອນແສງສວ່າງເກີດຂຶ້ນແກ່ບຸຄຄົລຜູ້ບໍ່ປມາດ ມີຄວາມພຽນ ອຸທິສກາຍແລະໃຈ ພຣາມນ໌ ນີ້ຄືການເຈາະປ້ໄຂ່ຄືອວິຊຊາອອກມາຄັ້ງທີ ໓ ຂອງເຮົາ ເຫມືອນການເຈາະອອກຈາກປ້ໄຂ່ຂອງລູກໄກ່”

## ເວຣັຍຊພຣາມນ໌ສະແດງຕົນເປັນອຸບາສົກ

[໑໕] ເມື່ອຕຣັສຢ່າງນີ້ ເວຣັຍຊພຣາມນ໌ໄດ້ຂາບທູລພຣະຜູ້ມີພຣະພາຄດັ່ງນີ້ວ່າ “ທ່ານພຣະໂຄດົມເປັນອ້າຍໃຫຍ່ ຜູ້ປະເສີດທີ່ສຸດ ທ່ານພຣະໂຄດົມ ພາສິຕຂອງພຣະອົງຄ໌ ຊັດແຈ້ງນ່ອນຍິ່ງນັກພຣະອົງຄ໌
ຊົງປະກາດທັມແຈ່ມແຈ້ງ ໂດຍປະການຕ່າງໆ ປຽບເຫມືອນບຸຄຄົລຫງາຍຂອງທີ່ຄວ່ຳ ເປີດຂອງທີ່ປິດ ບອກທາງແກ່ຜູ້ຫລົງທາງ ຫລືຕາມປະທີປໃນທີ່ມືດ ດ້ວຍຕັ້ງໃຈວ່າ ຄົນມີຕາດີຈັກເຫັນຮູບຂ້າພຣະ ອົງຄ໌ນີ້ ຂໍເຖິງທ່ານພຣະໂຄດົມພ້ອມທັງພຣະທັມແລະພຣະສົງຂ໌ເປັນສຣນະ ຂໍທ່ານພຣະໂຄດົມຈົ່ງຊົງ ຈຳຂ້າພຣະອົງຄ໌ວ່າເປັນອຸບາສົກຜູ້ເຖິງສຣນະ ຕັ້ງແຕ່ວັນນີ້ເປັນຕົ້ນໄປຈົນຕລອດຊີວິດແລະຂໍທ່ານພຣະໂຄດົມພ້ອມກັບພິກສຸສົງຂ໌ຊົງຮັບຄຳນິມົນຕ໌ຂອງຂ້າພຣະອົງຄ໌ ຢູ່ຈຳພັນສາທີ່ເມືອງເວຣັຍຊາດ້ວຍເຖີດ”
ພຣະຜູ້ມີພຣະພາຄຊົງຮັບຄຳນິມົນຕ໌ໂດຍດຸສນີພາພ ຄັນເວຣັຍຊພຣາມນ໌ຊາບວ່າພຣະຜູ້ມີພຣະພາຄຊົງຮັບນິມົນຕ໌ແລ້ວຈຶ່ງລຸກຂຶ້ນຈາກອາສນະ ຖວາຍບັງຄົມພຣະຜູ້ມີພຣະພາຄກະທຳປະທັກສິນ(ວຽນໄປທາງຂວາ)ແລ້ວຈາກໄປ

## ເມືອງເວຣັຍຊາເກີດເຂົ້າຍາກຫມາກແພງ

[໑໖] ສມັຍນັ້ນ ເມືອງເວຣັຍຊາເກີດເຂົ້າຍາກຫມາກແພງ ປະຊາຊົນມີຄວາມເປັນຢູ່ຍາກແຄ້ນໃຊ້ສລາກປັນສ່ວນຊື້ອາຫານ ລົ້ມຕາຍກັນກະດູກຂາວເກື່ອນ ຍາກທີ່ພຣະອຣິຍະຈະບິນທບາຕຍັງຊີພໄດ້ ຕໍ່ມາ ພວກພໍ່ຄ້າມ້າຊາວເມືອງອຸຕຕຣາບົຖ ມີມ້າຢູ່ປະມານ ໕໐໐ ຕົວ ເຂົ້າພັກແຮມຍາມຣະດູຝົນໃນເມືອງເວຣັຍຊາ ພວກເຂົາກະກຽມເຂົ້າຫນຶ້ງ ເພື່ອຖວາຍພຣະພິກສຸຮູບລະປະມານ ໑ ທະນານ ໄວ້ທີ່ຄອກມ້າ ຮຸ່ງເຊົ້າ ພິກສຸທັງຫລາຍຄອງອັນຕຣວາສກ ຖືບາຕຣແລະຈີວອນໄປບິນທບາຕໃນເມືອງ

ເວຣັຍ໌ຊາ ບິນ ຫຼບາຕບໍ່ໄດ້ເລີຍ ຈຶ່ງໄປທີ່ຄອກມ້າ ຮັບເຂົ້າຫນຶ້ງຮູປລະປະມານ ໑ ທະນານ ນຳໄປຕຳໃຫ້ລະອຽດແລ້ວສັນ ສ່ວນພຣະອານົນທ໌ບົດເຂົ້າຫນຶ້ງປະມານ ໑ ທະນານ ເທິງຫີນ ບົດແລ້ວນ້ອມເຂົ້າໄປຖວາຍພຣະຜູ້ມີພຣະພາຄ ພຣະອົງຄ໌ສເວີຍເຂົ້ານັ້ນ

## ພຸທທປະເພນີ

ພຣະຜູ້ມີພຣະພາຄໄດ້ຊົງສດັບສຽງຄົກ ພຣະຕຖາຄົຕເຈົ້າທັງຫລາຍຊົງຊາບເຣື້ອງ ຕຣັສຖາມກໍມີ ບໍ່ຕຣັສຖາມກໍມີ ຊົງຊາບກາລອັນຄວຣ ຕຣັສຖາມກໍມີ ບໍ່ຕຣັສຖາມກໍມີ ຕຣັສຖາມເຣື້ອງທີ່ເປັນປໂຍດ ບໍ່ຕຣັສຖາມເຣື້ອງທີ່ບໍ່ເປັນປໂຍດ ເພາະພຣະຕຖາຄົຕເຈົ້າທັງຫລາຍ ຊົງຂຈັດເຣື້ອງທີ່ບໍ່ເປັນປໂຍດເສັຽ ດ້ວຍອຣິຍມັຄແລ້ວ ພຣະຜູ້ມີພຣະພາຄພຸທທເຈົ້າທັງຫລາຍສອບຖາມພິກສຸທັງຫລາຍດ້ວຍເຫຕຸ ໔ ປະກາຣ ຄື ຈະຊົງສະແດງທັມຢ່າງນຶ່ງ ຈະຊົງບັນຍັຕສິກຂາບົທແກ່ພຣະສາວົກຢ່າງນຶ່ງ ລຳດັບນັ້ນ ພຣະຜູ້ມີພຣະພາຄຕຣັສຮຽກພຣະອານົນທ໌ມາຮັບສັ່ງຖາມວ່າ “ນັ້ນສຽງຄົກແມ່ນບໍ່ອານົນທ໌” ພຣະອານົນທ໌ຈຶ່ງຂາບທູລເຣື້ອງນັ້ນໃຫ້ຊົງຊາບ “ອານົນທ໌ ດີແລ້ວໆ ພວກທ່ານເປັນສັຕບຸຣຸສ ຊນະໄດ້ເດັດຂາດແລ້ວ ເຂົ້າສາລີເຈືອດ້ວຍເນື້ອເພື່ອນພຣົມຈາຣີໃນພາຍຫລັງຈະພາກັນດູຫມິ່ນ”

## ພຣະວິນັຍປິດົກ ມຫາວິພັງຄ໌ ເວຣັຍຊກັນທ໌
## ພຣະມຫາໂມຄຄັລລານະເປັ່ງສີຫນາທ

[໑ໆ] ຄັ້ງນັ້ນ ທ່ານພຣະມຫາໂມຄຄັລລານະເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຄັນເຖິງແລ້ວໄດ້ຖວາຍບັງຄົມພຣະຜູ້ມີພຣະພາຄແລ້ວນັ່ງລົງ ນະ ທີ່ສົມຄວຣ ທ່ານພຣະມຫາໂມຄຄັລລານະຜູ້ນັ່ງຢູ່ ນະ ທີ່ສົມຄວຣແລ້ວໄດ້ຂາບທູລພຣະຜູ້ມີພຣະພາຄ ດັ່ງນີ້ວ່າ “ເວລານີ້ເມືອງເວຣັຍ໌ຊາເກີດເຂົ້າຍາກຫມາກແພງ ປະຊາຊົນມີຄວາມເປັນຢູ່ຍາກແຄ້ນ ໃຊ້ສລາກປັນສ່ວນຊື້ອາຫາຣ ລົ້ມຕາຍກັນກະດູກຂາວເກື່ອນ ຍາກທີ່ພຣະອຣິຍະຈະບິນຫຼບາຕຍັງຊີພໄດ້ ພຣະພຸທທເຈົ້າຂ້າ ພື້ນດິນໃຕ້ມຫາປຖພີນີ້ມີໂອຊະ ມີຣົສແຊບ ເຫມືອນນ້ຳເຜິ້ງຫວີ່ທີ່ບໍ່ມີຕົວອ່ອນ ຂໍປະທານພຣະໂອກາສ ຂ້າພຣະພຸທທເຈົ້າຈະພິກແຜ່ນດິນ ເພື່ອໃຫ້ພິກສຸທັງຫລາຍໄດ້ສັນງ້ວນດິນ” “ໃນແຜ່ນດິນມີສັຕວ໌ອາສັຍຢູ່ທ່ານຈະເຮັດຢ່າງໃດກັບສັຕວ໌ເຫລົ່ານັ້ນ ໂມຄຄັລລານະ” “ຂ້າພຣະພຸທທເຈົ້າຈະເນຣມິຕຝ່າມືຂ້າງນຶ່ງໃຫ້ເປັນເຊັ່ນແຜ່ນດິນໃຫຍ່ ຍ້າຍເຫລົ່າສັຕວ໌ທີ່ອາສັຍແຜ່ນ ດິນຢູ່ ໄປຮວມກັນທີ່ຝ່າມືນັ້ນ ແລ້ວ

ໃຊ້ມືອີກຂ້າງນຶ່ງພິກແຜ່ນດິນ ພຣະພຸທຫຼເຈົ້າຂ້າ” “ຢ່າເລີຍ ໂມຄຄັລລານະ ທ່ານຢ່າພໍໃຈທີ່ຈະພິກແຜ່ນດິນເລີຍ ຫມູ່ສັຕວ໌ຈະເຂົ້າໃຈຜິດໄດ້” “ຂໍປະທານພຣະໂອກາສໃຫ້ພິກສຸສົງຂ໌ທຸກຮູປໄປບິນຫຼບາຕໃນອຸຕຕຣກຸຣຸທວີປເຖີດ ພຣະພຸທຫຼເຈົ້າຂ້າ” “ທ່ານຈະເຮັດຢ່າງໃດກັບພິກສຸທີ່ບໍ່ມີຣິທທິ໌” “ຂ້າພຣະພຸທຫຼເຈົ້າຈັກເຮັດໃຫ້ພິກສຸສົງຂ໌ທຸກຮູປໄປໄດ້ ພຣະພຸທຫຼເຈົ້າຂ້າ”
“ຢ່າເລີຍ ໂມຄຄັລລານະ ທ່ານຢ່າພໍໃຈກາຣທີ່ຈະພາພິກສຸສົງຂ໌ທຸກຮູປໄປບິນຫຼບາຕທີ່ອຸຕຕຣກຸຣຸທວີປເລີຍ”

## ພຣະສາຣີບຸຕຣທູລຖາມເຖິງເຫຕຸທີ່ເຮັດໃຫ້ພຣົມຈັນຍ໌ດຳຣົງຢູ່ດົນແລະບໍ່ດົນ

[໑໗] ຄັ້ງນັ້ນ ທ່ານພຣະສາຣີບຸຕຣຫລີກຫລີບຢູ່ໃນທີ່ສງັດ ຣຳເພິງຂຶ້ນມາຢ່າງນີ້ວ່າ “ພຣົມຈັນຍ໌ຂອງພຣະຜູ້ມີພຣະພາຄພຸທຫຼເຈົ້າພຣະອົງຄ໌ໃດດຳຣົງຢູ່ບໍ່ດົນ ຂອງພຣະຜູ້ມີພຣະພາຄພຸທຫຼເຈົ້າພຣະອົງຄ໌ໃດດຳຣົງຢູ່ດົນ” ຄັນຮອດຍາມແລງຈຶ່ງອອກຈາກທີ່ພັກ ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຄັນເຖິງແລ້ວໄດ້ຖວາຍບັງຄົມພຣະຜູ້ມີພຣະພາຄແລ້ວນັ່ງລົງ ນະ ທີ່ສົມຄວຣ ທ່ານພຣະສາຣີບຸຕຣຜູ້ນັ່ງຢູ່ ນະ ທີ່ສົມຄວຣແລ້ວ ໄດ້ຂາບທູລພຣະຜູ້ມີພຣະພາຄດັ່ງນີ້ວ່າ “ພຣະພຸທຫຼເຈົ້າຂ້າເມື່ອຂ້າພຣະອົງຄ໌ຫລີກ ຫລີບຢູ່ໃນທີ່ສງັດ ໄດ້ເກີດຄວາມຣຳເພິງຂຶ້ນມາຢ່າງນີ້ວ່າ ‘ພຣົມຈັນຍ໌ຂອງພຣະຜູ້ມີພຣະພາຄພຸທຫຼເຈົ້າພຣະອົງຄ໌ໃດດຳຣົງຢູ່ບໍ່ດົນ ຂອງພຣະຜູ້ມີພຣະພາຄພຸທຫຼເຈົ້າພຣະອົງຄ໌ໃດດຳຣົງຢູ່ດົນ ພຣະພຸທຫຼເຈົ້າຂ້າ” ພຣະຜູ້ມີພຣະພາຄຕຣັສຕອບວ່າ “ສາຣີບຸຕຣ ພຣົມຈັນຍ໌ຂອງພຣະພຸທຫຼເຈົ້າວິປັສສີ ພຣະພຸທຫຼເຈົ້າສິຂີ ພຣະພຸທຫຼເຈົ້າເວສສພູ ດຳຣົງຢູ່ບໍ່ດົນ ພຣົມຈັນຍ໌ຂອງພຣະພຸທຫຼເຈົ້າກກຸສັນທະ ພຣະພຸທຫຼເຈົ້າໂກນາຄມນະ ແລະພຣະພຸທຫຼເຈົ້າກັສສປະ ດຳຣົງຢູ່ດົນ”
[໑໘] “ແມ່ນຫຍັງເປັນເຫຕຸເປັນປັຈຈັຍເຮັດໃຫ້ພຣົມຈັນຍ໌ຂອງພຣະພຸທຫຼເຈົ້າວິປັສສີ ພຣະພຸທຫຼເຈົ້າສິຂີ ແລະພຣະພຸທຫຼເຈົ້າເວສສພູ ດຳຣົງຢູ່ບໍ່ດົນ ພຣະພຸທຫຼເຈົ້າຂ້າ”
“ສາຣີບຸຕຣ ພຣະພຸທຫຼເຈົ້າວິປັສສີ ພຣະພຸທຫຼເຈົ້າສິຂີ ພຣະພຸທຫຼເຈົ້າເວສສພູ ຊົງຜ່ອນຄາຍທີ່ຈະສະແດງທັມໂດຍພິສດາຣແກ່ສາວົກ ສຸຕຕະ ເຄີຍຍະ ເວຍຍາກຣນ ຄາຖາ ອຸທານ ອິຕິວຸຕຕກະ ຊາດົກ ອັພພູຕທັມ ເວທັລລະ ຂອງພຣະພຸທຫຼເຈົ້າທັງ ໓ ພຣະອົງຄ໌ຈຶ່ງມີຫນ້ອຍ ບໍ່ໄດ້ຊົງບັນຍັຕສິກຂາບົທໄວ້ແກ່ສາວົກ ບໍ່ມີກາຣສະແດງປາຕິໂມກຂ໌ ເມື່ອຫມົດພຣະພຸທຫຼເຈົ້າແລະສາວົກຜູ້ຕຣັສຮູ້ຕາມແລ້ວ ສາວົກຊັ້ນຫລັງໆ ຕ່າງຊື່ ຕ່າງໂຄຕຣ ຕ່າງຊາຕິວັນນະ ໄດ້ເຂົ້າມາບວຊຈາກຕ່າງຕະກູນທ່ານເຫລົ່ານັ້ນພາໃຫ້ພຣົມຈັນຍ໌ສູນສິ້ນໄປໄວພລັນ ເຫມືອນດອກໄມ້ນານາພັນກອງຢູ່ເທິງແຜ່ນກະດານ ຍັງບໍ່ຮ້ອຍດ້ວຍດ້າຍ ຍ່ອມຖືກລົມພັດກະແຈກກະຈາຍໄປ ເພາະເຫຕຸໃດ ເພາະບໍ່ໄດ້ເອົາດ້າຍ

ຮ້ອຍໄວ້ ຂໍ້ນີ້ແນວໃດ ເມື່ອພຣະພຸທທເຈົ້າແລະສາວົກຜູ້ຕຣັສຮູ້ຕາມແລ້ວ ສາວົກຊັ້ນຫລັງໆ ຕ່າງຊື່ ຕ່າງໂຄຕຣ ຕ່າງຊາຕິວັນນະ ໄດ້ເຂົ້າມາບວຊຈາກຕ່າງຕະກູນ ທ່ານເຫລົ່ານັ້ນພາໃຫ້ພຣົມຈັນຍ໌ສູນສິ້ນໄປໄວພລັນແນວນັ້ນ ອີກຢ່າງນຶ່ງ ພຣະພຸທທເຈົ້າເຫລົ່ານັ້ນບໍ່ຊົງຜ່ອນຄາຍທີ່ຈະກຳຫນົດຈິຕຂອງສາວົກດ້ວຍພຣະຫັຍແລ້ວຊົງສັ່ງສອນ ສາຣີບຸຕຣ ເຣື່ອງເຄີຍເກີດຂຶ້ນແລ້ວ ພຣະພຸທທເຈົ້າເວສສພູ ຊົງກຳຫນົດຈິຕພິກສຸສົງຂ໌ແລ້ວຊົງສັ່ງສອນພິກສຸສົງຂ໌ ໑,໐໐໐ ຮູບ ໃນຮາວປ່າຫນ້າຢ້ານກົວແຫ່ງນຶ່ງວ່າ "ທ່ານທັງຫລາຍຈົ່ງພິຈາຣນາເຊັ່ນນີ້ ຢ່າພິຈາຣນາຢ່າງນັ້ນ ຈົ່ງຕັ້ງໃຈຢ່າງນີ້ ຢ່າຕັ້ງໃຈຢ່າງນັ້ນ ຈົ່ງລະສິ່ງນີ້ ຈົ່ງເຂົ້າເຖິງສິ່ງນີ້ຢູ່ເຖີດ" ຈິຕຂອງພິກສຸ ໑,໐໐໐ ຮູບ ທີ່ພຣະພຸທທເຈົ້າເວສສພູຊົງສັ່ງສອນ ຫລຸດພົ້ນຈາກອາສວະ ເພາະບໍ່ມີຄວາມຖືຫມັ້ນ ສາຣີບຸຕຣ ເພາະຮາວປ່າຫນ້າຢ້ານກົວ ຫນ້າສະທ້ານຢ້ານກົວ ຈຶ່ງມີເຣື່ອງດັ່ງນີ້ ຄື ພິກສຸຜູ້ບໍ່ປາສຈາກຣາຄະ ເຂົ້າໄປຮາວປ່າ ສ່ວນຫລາຍເກີດຄວາມຢ້ານຂົນລຸກຂົນພອງ ສາຣີບຸຕຣ ນີ້ຄືເຫຕຸປັຈຈັຍທີ່ເຮັດໃຫ້ພຣົມຈັນຍ໌ຂອງພຣະພຸທທເຈົ້າວິປັສສີ ພຣະພຸທທເຈົ້າສິຂີ ພຣະພຸທທເຈົ້າເວສສພູ ດຳຣົງຢູ່ບໍ່ດົນ"

[໑໐] "ແມ່ນຫຍັງເປັນເຫຕຸເປັນປັຈຈັຍເຮັດໃຫ້ພຣົມຈັນຍ໌ຂອງພຣະພຸທທເຈົ້າກກຸສັນທະ ພຣະພຸທທເຈົ້າໂກນາຄມນະ ແລະພຣະພຸທທເຈົ້າກັສສປະ ດຳຣົງຢູ່ດົນ ພຣະພຸທທເຈົ້າຂ້າ" "ສາຣີບຸຕຣ ພຣະພຸທທເຈົ້າກກຸສັນທະ ພຣະພຸທທເຈົ້າໂກນາຄມນະ ແລະພຣະພຸທທເຈົ້າກັສສປະ ບໍ່ຊົງ ຜ່ອນຄາຍທີ່ຈະຊົງສະແດງທັມໂດຍພິສດາຣແກ່ສາວົກ ສຸຕຕະ ເຄຍຍະເວຍຍາກຣນ ຄາຖາ ອຸທານ ອິຕິວຸຕຕກະ ຊາດົກ ອັພພູຕທັມ ເວທັລລະຂອງພຣະພຸທທເຈົ້າ ລ ພຣະອົງຄ໌ຈຶ່ງມີມາກ ຊົງບັນຍັຕສິກຂາ ບົທໄວ້ແກ່ສາວົກ ມີການສະແດງປາຕິໂມກຂ໌ ເມື່ອພຣະພຸທທເຈົ້າແລະສາວົກຜູ້ຕຣັສຮູ້ຕາມແລ້ວ ສາວົກຊັ້ນຫລັງໆ ຕ່າງຊື່ ຕ່າງໂຄຕຣ ຕ່າງຊາຕິວັນນະ ໄດ້ເຂົ້າມາບວຊຈາກຕ່າງຕະກູນ ທ່ານເຫລົ່ານັ້ນພາໃຫ້ພຣົມຈັນຍ໌ດຳຣົງຢູ່ດົນ ເຫມືອນດອກໄມ້ນານາພັນກອງຢູ່ເທິງແຜ່ນກະດານ ເອົາດ້າຍຮ້ອຍໄວ້ ຍ່ອມບໍ່ຖືກລົມພັດກະແຈກກະຈາຍໄປ ເພາະເຫຕຸໃດ ເພາະເອົາດ້າຍຮ້ອຍໄວ້ ຂໍ້ນີ້ແນວໃດ ເມື່ອພຣະພຸທທເຈົ້າແລະສາວົກຜູ້ຕຣັສຮູ້ຕາມແລ້ວ ສາວົກຊັ້ນຫລັງໆ ຕ່າງຊື່ ຕ່າງໂຄຕຣ ຕ່າງຊາຕິວັນນະ ໄດ້ເຂົ້າມາບວຊຈາກຕ່າງຕະກູນ ທ່ານເຫລົ່ານັ້ນພາໃຫ້ພຣົມຈັນຍ໌ດຳຣົງຢູ່ດົນແນວນັ້ນ ສາຣີບຸຕຣ ນີ້ຄືເຫຕຸປັຈຈັຍທີ່ເຮັດໃຫ້ພຣົມຈັນຍ໌ຂອງພຣະພຸທທເຈົ້າກກຸສັນທະ ພຣະພຸທທເຈົ້າໂກນາຄມນະ ແລະພຣະພຸທທເຈົ້າກັສສປະ ດຳຣົງຢູ່ດົນ"

ຊົງປາຣົພເຫຕຸທີ່ຈະບັນຍັຕສິກຂາບົທ

[໔໑] ລຳດັບນັ້ນ ທ່ານພຣະສາຣີບຸຕຣລຸກຂຶ້ນຫົ່ມຜ້າບ່ຽງບ່າປະນົມມືໄປທາງພຣະຜູ້ມີພຣະພາຄ ຂາບທູລວ່າ "ເຖິງເວລາແລ້ວພຣະພຸທທເຈົ້າຂ້າ ທີ່ພຣະຜູ້ມີພຣະພາຄຈະຊົງບັນຍັດສິກຂາບົທ ຊົງຍົກປາຕິໂມກຂ໌ຂຶ້ນສະແດງແກ່ພຣະສາວົກອັນຈະເປັນເຫຕຸໃຫ້ພຣົມຈັນຍ໌ດຳຣົງຢູ່ໄດ້ຍືນນານ" "ຈົ່ງຖ້າໄປກ່ອນເຖີດສາຣີບຸຕຣ ຕຖາຄົຕຮູ້ເວລາໃນເຣື້ອງທີ່ຈະບັນຍັຕສິກຂາບົທນັ້ນ ສາສດາຈະຍັງບໍ່ບັນຍັຕສິກຂາບົທແກ່ສາວົກ ບໍ່ຍົກປາຕິໂມກຂ໌ຂຶ້ນສະແດງ ຕລອດເວລາທີ່ຍັງບໍ່ເກີດອາສວັຕຖານີຍທັມບາງຢ່າງໃນສົງຂ໌ ເມື່ອເກີດອາສວັຕຖານີຍທັມບາງຢ່າງໃນສົງຂ໌ ຕຖາຄົຕຈຶ່ງຈະບັນຍັຕສິກຂາບົທຈະຍົກປາຕິໂມກຂ໌ຂຶ້ນສະແດງແກ່ສາວົກ ເພື່ອຂຈັດທັມເຫລົ່ານັ້ນ ສາຣີບຸຕຣ ອາສວັຕຖານີຍທັມບາງຢ່າງຍັງບໍ່ເກີດໃນສົງຂ໌ ຕຣາບເທົ່າທີ່ສົງຂ໌ຍັງບໍ່ເປັນຫມູ່ໃຫຍ່ເພາະມີພົກສຸບວຊດົນນານ ເມື່ອສົງຂ໌ເປັນຫມູ່ໃຫຍ່ເພາະມີພົກສຸບວຊດົນນານ ແລະມີອາສວັຕຖານີຍທັມບາງຢ່າງເກີດໃນສົງຂ໌ ຕຖາຄົຕຈະບັນຍັຕສິກຂາບົທ ຈະຍົກປາຕິໂມກຂ໌ຂຶ້ນສະແດງແກ່ສາວົກ ເພື່ອຂຈັດທັມເຫລົ່ານັ້ນ ສາຣີບຸຕຣ ອາສວັຕຖານີຍທັມບາງຢ່າງຍັງບໍ່ເກີດໃນສົງຂ໌ ຕຣາບເທົ່າທີ່ສົງຂ໌ຍັງບໍ່ເປັນຫມູ່ໃຫຍ່ເພາະແຜ່ຫລາຍ ເມື່ອສົງຂ໌ເປັນຫມູ່ໃຫຍ່ເພາະແຜ່ຫລາຍ ແລະມີອາສວັຕຖານີຍທັມບາງຢ່າງເກີດໃນສົງຂ໌ ຕຖາຄົຕຈະບັນຍັຕສິກຂາບົທ ຈະຍົກປາຕິໂມກຂ໌ຂຶ້ນສະແດງແກ່ສາວົກ ເພື່ອຂຈັດທັມເຫລົ່ານັ້ນ ສາຣີບຸຕຣ ອາສວັຕຖານີຍທັມບາງຢ່າງຍັງບໍ່ເກີດໃນສົງຂ໌ ຕຣາບເທົ່າທີ່ສົງຂ໌ຍັງບໍ່ເປັນຫມູ່ໃຫຍ່ເພາະມີລາພສັກກາຣະມາກ ເມື່ອສົງຂ໌ເປັນຫມູ່ໃຫຍ່ເພາະມີລາພສັກກາຣະມາກ ແລະມີອາສວັຕຖານີຍທັມບາງຢ່າງເກີດໃນສົງຂ໌ ຕຖາຄົຕຈະບັນຍັຕສິກຂາບົທ ຈະຍົກປາຕິໂມກຂ໌ຂຶ້ນສະແດງແກ່ສາວົກ ເພື່ອຂຈັດທັມເຫລົ່ານັ້ນ ສາຣີບຸຕຣ ອາສວັຕຖານີຍທັມບາງຢ່າງຍັງບໍ່ເກີດໃນສົງຂ໌ ຕຣາບເທົ່າທີ່ສົງຂ໌ຍັງບໍ່ເປັນຫມູ່ໃຫຍ່ເພາະຄວາມເປັນພຫູສູຕ ເມື່ອສົງຂ໌ເປັນຫມູ່ໃຫຍ່ເພາະຄວາມເປັນພຫູສູຕ ແລະມີອາສວັຕຖານີຍທັມບາງຢ່າງເກີດໃນສົງຂ໌ ຕຖາຄົຕຈະບັນຍັຕ ສິກ ຂາບົທຈະຍົກປາຕິ ໂມກຂ໌ຂຶ້ນສະແດງແກ່ສາວົກ ເພື່ອຂຈັດທັມເຫລົ່ານັ້ນ ສາຣີບຸຕຣ ກໍພົກສຸສົງຂ໌ຍັງບໍ່ມີສນຽດ ບໍ່ມີໂທສ ບໍ່ມີສິ່ງມົວຫມອງ ບໍຣິສຸດທ໌ຜຸດຜ່ອງ ດຳຣົງຢູ່ໃນສາຣຄຸນ ແທ້ຈິງໃນພົກສຸ ໕໐໐ ຮູບນີ້ ຜູ້ມີຄຸນທັມ ຢ່າງຕ່ຳກໍຊັ້ນໂສດາບັນ ບໍ່ມີທາງຕົກຕ່ຳ ມີຄວາມແນ່ນອນທີ່ຈະສຳເຣັຈສັມໂພທິໃນວັນຂ້າງຫນ້າ"

## ສເດັຈນິເວສນ໌ເວຣັຍຊພຣາມນ໌

[໔໔] ຕໍ່ມາ ພຣະຜູ້ມີພຣະພາຄຕຣັສຮຽກທ່ານພຣະອານົນທ໌ມາຮັບສັ່ງວ່າ "ອານົນທ໌ ພຣະຕຖາຄົຕທັງຫລາຍຍັງບໍ່ໄດ້ບອກລາຜູ້ທີ່ນິມົນຕ໌ໃຫ້ຢູ່ຈຳພັນສາ ຈະບໍ່ຈາກໄປ ເຣື້ອງນີ້ເປັນປະເພນີຂອງ

ພຣະຕຖາຄົຕທັງຫລາຍ ເຮົາຈະໄປາເວຣັຍຊພຣາມນ໌” ພຣະອານົນທ໌ທູລສນອງພຣະພຸທທດຳຣັສ ແລ້ວ ຄັນແລ້ວພຣະຜູ້ມີພຣະພາຄຊົງຄອງອັນຕຣວາສກ ຖືບາຕຣແລະຈີວອນ ມີພຣະອານົນທ໌ຕາມສເດັຈ ສເດັຈພຣະພຸທທດຳເນີນໄປເຖິງນິເວສນ໌ຂອງເວຣັຍຊພຣາມນ໌ ຄັນເຖິງແລ້ວຈຶ່ງປະທັບນັ່ງເທິງອາສນະທີ່ ເຂົາຈັດຖວາຍ ຊົງບອກເວຣັຍຊພຣາມນ໌ຜູ້ມາເຝົ້າວ່າ “ທ່ານນິມົນຕ໌ເຮົາຢູ່ຈຳພັນສາ ເຮົາຂໍລາທ່ານ ຕ້ອງການຈະຈາຣິກໄປໃນຊົນບົທ” ເວຣັຍຊພຣາມນ໌ຂາບທູລວ່າ “ເປັນຄວາມແມ່ນແທ້ຂ້າພຣະພຸທທເຈົ້ານິມົນຕ໌ທ່ານພຣະໂຄດົມ ຢູ່ຈຳພັນສາ ແຕ່ຂ້າພຣະພຸທທເຈົ້າຍັງບໍ່ໄດ້ຖວາຍໄທຍທັມທີ່ໄດ້ຕັ້ງໃຈເອົາໄວ້ ສິ່ງນັ້ນບໍ່ແມ່ນຈະບໍ່ມີ ແລະບໍ່ແມ່ນວ່າຂ້າພຣະພຸທທເຈົ້າຈະບໍ່ເຕັມໃຈຖວາຍ ໄຕຣມາສທີ່ຜ່ານມາ ພຣະອົງຄ໌ຍັງບໍ່ໄດ້ຮັບໄທຍ ທັມນັ້ນ ເພາະຜູ້ຄອງເຮືອນມີກິຈຫລາຍ ມີທຸຣະຫລາຍ ຂໍທ່ານພຣະໂຄດົມພ້ອມກັບພິກສຸສົງຂ໌ຈົ່ງຮັບອາຫາຣຂອງຂ້າພຣະພຸທທເຈົ້າເພື່ອຈະເຣີນກຸສົລໃນມື້ອື່ນນີ້ເຖີດ” ພຣະຜູ້ມີພຣະພາຄຊົງຮັບຄຳນິມົນຕ໌ໂດຍດຸສນີພາພ ຊົງຊີ້ແຈງໃຫ້ເວຣັຍຊພຣາມນ໌ເຫັນແຈ້ງ ຊວນໃຫ້ ຢາກຮັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າປອບປະໂລມໃຈໃຫ້ສົດຊື່ນເບີກບານດ້ວຍທັມມີກຖາ ແລ້ວສເດັຈລຸກຈາກອາສນະຫລີກໄປ ເມື່ອຜ່ານຣາຕຣີນັ້ນໄປ ເວຣັຍຊພຣາມນ໌ສັ່ງໃຫ້ຕຽມຂອງຄ້ຽວຂອງສັນອັນປານີຕໄວ້ໃນບ້ານ ແລ້ວໃຫ້ຄົນໄປຂາບທູລພັຕກາລແດ່ພຣະຜູ້ມີພຣະພາຄວ່າ “ທ່ານພຣະໂຄດົມເຖິງເວລາແລ້ວ ພັຕຕາຫາຣແລ້ວໆ”

[໔໓] ຄັນເວລາເຊົ້າ ພຣະຜູ້ມີພຣະພາຄຊົງຄອງອັນຕຣວາສກ ຖືບາຕຣແລະຈີວອນສເດັຈພຣະພຸທທດຳເນີນໄປຍັງນິເວສນ໌ຂອງເວຣັຍຊພຣາມນ໌ ປະທັບນັ່ງເໜືອພຣະພຸທທອາສນ໌ພ້ອມພິກສຸສົງຂ໌ ຄັນແລ້ວເວຣັຍຊ ພຣາມນ໌ ປະເຄນຂອງຄ້ຽວຂອງສັນອັນປານີຕດ້ວຍຕົວເອງ ເມື່ອພຣະຜູ້ມີພຣະພາຄສເວີຍເສັດແລ້ວລະພຣະຫັຕຖ໌ຈາກບາຕຣ ຈຶ່ງທູລຖວາຍໄຕຣຈີວອນໃຫ້ຊົງຄອງແລະຖວາຍຜ້າຄູ່ໃຫ້ພິກສຸຄອງຮູປລະຊຸດ ພຣະຜູ້ມີພຣະພາຄຊົງຊີ້ແຈງໃຫ້ເວຣັຍຊພຣາມນ໌ເຫັນແຈ້ງ ຊວນໃຫ້ຢາກຮັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນເບີກບານດ້ວຍທັມມີກຖາແລ້ວສເດັຈຈາກໄປ ພຣະພຸທທອົງຄ໌ປະທັບຢູ່ ນະ ເມືອງເວຣັຍຊາຕາມພຣະອັທຍາສັຍແລ້ວໄດ້ສເດັຈພຣະພຸທທດຳເນີນໄປຍັງເມືອງທ່າປຍາຄະ ບໍ່ຊົງແວະເມືອງໂສເຣຍຍະ ເມືອງສັງກັສສະ ເມືອງກັນນກຸຊຊະ ຊົງຂ້າມແມ່ນ້ຳຄົງຄາທີ່ເມືອງທ່າປຍາຄະ ສເດັຈພຣະພຸທທດຳເນີນເຖິງກຸງພາຣານສີ ຄັນປະທັບທີ່ກຸງພາຣານສີຕາມພຣະອັທຍາສັຍແລ້ວ ສເດັຈຈາຣິກໄປໂດຍລຳດັບ ຈົນເຖິງກຸງເວສາລີ ຊາບວ່າພຣະອົງຄ໌ປະທັບຢູ່ ນະ ກູຕາຄາຣສາລາ ປ່າມຫາວັນ ເຂຕກຸງເວສາລີນັ້ນ

## ເວຣັຍຊພານວາຣ ຈົບ

★★★★★★★★★★ ສົມ ສັກ ★★★★★★★★★★

## ພຣະວິນັຍປິດົກ ມະຫາວິພັງຄ໌ [໑. ປາຣາຊິກກັນທ໌] ປາຣາຊິກສິກຂາບົທທີ ໑ ສຸທິນນພານວາຣ

## ໑. ປາຣາຊິກກັນທ໌

## ປາຣາຊິກສິກຂາບົທທີ ໑

## ວ່າດ້ວຍການເສພເມຖຸນທັມ

## ສຸທິນພານວາຣ

[໘໔] ສມັຍນັ້ນ ທີ່ໝູ່ບ້ານກລັນທຄາມບໍ່ຫ່າງຈາກກຸງເວສາລີ ມີບຸຕຣຊາຍເສດຖີຊາວກລັນທຄາມຊື່ສຸທິນ ມື້ນຶ່ງ ເຂົາມີທຸຣະບາງຢ່າງຈຶ່ງເດີນທາງໄປໃນກຸງເວສາລີກັບໝູ່ເພື່ອນ ຂນະນັ້ນ ພຣະຜູ້ມີພຣະພາຄກຳລັງປະທັບນັ່ງສະແດງທັມທ້ອມລ້ອມດ້ວຍບໍຣິສັດຈຳນວນຫລາຍ ເຂົາໄດ້ເຫັນແລ້ວ ມີຄວາມຄິດວ່າ “ເຮັດຢ່າງໃດນໍ ເຮົາຈຶ່ງຈະໄດ້ຟັງທັມນຳເພິ່ນ” ຈຶ່ງເຂົ້າໄປຍັງບໍຣິສັດແລ້ວນັ່ງ ນະທີ່ສົມຄວຣ ໄດ້ມີຄວາມຄິດດັ່ງນີ້ວ່າ “ທັມຕາມທີ່ພຣະຜູ້ມີພຣະພາຄຊົງສະແດງນັ້ນ ເຮົາເຂົ້າໃຈວ່າ ‘ການທີ່ຜູ້ຢູ່ຄອງເຮືອນຈະປະພຶດພຣົມຈັນຍ໌ໃຫ້ບໍຣິສຸດທ໌ ບໍຣິບູຣນ໌ຢ່າງຍິ່ງເໝືອນສັງຂ໌ທີ່ຂັດແລ້ວບໍ່ແມ່ນກະທຳໄດ້ງ່າຍ’ ຢ່າກະນັ້ນເລີຍ ເຮົາຄວຣຈະປົງຜົມ ໂກນໜວດ ນຸ່ງຫົ່ມຜ້າກາສາຍະອອກຈາກເຮືອນໄປບວຊເປັນອນາຄາຣິກ” ຕໍ່ຈາກນັ້ນ ເມື່ອພຣະຜູ້ມີພຣະພາຄຊົງຊີ້ແຈງໃຫ້ເຫັນແຈ້ງຊວນໃຫ້ຢາກຮັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນເບີກບານດ້ວຍທັມມີກຖາແລ້ວ ບໍຣິສັດກໍລຸກຂຶ້ນຖວາຍບັງຄົມພຣະຜູ້ມີພຣະພາຄ ທຳປຣະທັກສິນ(ວຽນໄປທາງຂວາ)ແລ້ວຈາກໄປ

[໘໕] ຫລັງຈາກບໍຣິສັດຈາກໄປບໍ່ດົນ ສຸທິນກລັນທບຸຕຣເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຖວາຍບັງຄົມແລ້ວນັ່ງລົງ ນະ ທີ່ສົມຄວຣ ສຸທິນກລັນທບຸຕຣຜູ້ນັ່ງ ນະ ທີ່ສົມຄວຣແລ້ວໄດ້ຂາບທູລພຣະຜູ້ມີພຣະພາຄດັ່ງນີ້ວ່າ “ພຣະພຸທທເຈົ້າຂ້າ ທັມຕາມທີ່ພຣະຜູ້ມີພຣະພາຄຊົງສະແດງນັ້ນຂ້າພຣະພຸທທເຈົ້າເຂົ້າໃຈວ່າ ‘ການທີ່ຜູ້ຢູ່ຄອງເຮືອນຈະປະພຶດພຣົມຈັນຍ໌ໃຫ້ບໍຣິສຸດທ໌ບໍຣິບູຣນ໌ຢ່າງຍິ່ງເໝືອນສັງຂ໌ທີ່ຂັດແລ້ວ ບໍ່ແມ່ນກະທຳໄດ້ງ່າຍ’ ຂ້າພຣະພຸທທເຈົ້າປຣາຖນາຈະປົງຜົມ ໂກນໜວດ ນຸ່ງຫົ່ມຜ້າກາສາຍະ ອອກຈາກເຮືອນມາບວຊ ເປັນອນາຄາຣິກ ຂໍພຣະຜູ້ມີພຣະພາຄຊົງພຣະ

ກຣຸນາໃຫ້ຂ້າພຣະພຸທທເຈົ້າບວຊດ້ວຍເຖີດ"
"ສຸທິນ ມາຣດາບິດາອນຸຍາຕໃຫ້ທ່ານອອກຈາກເຮືອນບວຊເປັນອນາຄາຣິກແລ້ວຫລື"
"ຍັງບໍ່ໄດ້ອນຸຍາຕ ພຣະພຸທທເຈົ້າຂ້າ"
"ສຸທິນ ພຣະຕຖາຄົຕທັງຫລາຍຍ່ອມບໍ່ບວຊໃຫ້ກຸລບຸຕຣທີ່ມາຣດາບິດາຍັງບໍ່ອນຸຍາຕ"
"ຂ້າພຣະພຸທທເຈົ້າ ຈັກຫາວິທີໃຫ້ມາຣດາບິດາອນຸຍາຕໃຫ້ຂ້າພຣະພຸທທເຈົ້າອອກຈາກເຮືອນມາບວຊເປັນອນາຄາຣິກ ພຣະພຸທທເຈົ້າຂ້າ"

ຂໍອນຸຍາຕອອກບວຊ

[໔໖] ຕໍ່ມາ ສຸທິນກລັນທບຸຕຣທຳທຸຣະໃນກຸງເວສາລີສຳເຣັດແລ້ວ ກັບໄປຫາມາຣດາບິດາທີ່ກລັນທຄາມ ຄັນເຖິງແລ້ວຈຶ່ງກ່າວກັບມາຣດາບິດາດັ່ງນີ້ວ່າ "ຍາພໍ່ຍາແມ່ ທັມຕາມທີ່ພຣະຜູ້ມີພຣະພາຄຊົງສະແດງນັ້ນ ລູກເຂົ້າໃຈວ່າ 'ການທີ່ຜູ້ຢູ່ຄອງເຮືອນຈະປະພຶດພຣົມຈັນຍ໌ໃຫ້ບໍຣິສຸດທ໌ບໍຣິບູຣນ໌ຢ່າງຍິ່ງເຫມືອນສັງຂ໌ທີ່ຂັດແລ້ວນີ້ບໍ່ແມ່ນກະທຳໄດ້ງ່າຍ' ລູກປຣາຖນາຈະປົງຜົມ ໂກນຫນວດນຸ່ງຫົ່ມຜ້າກາສາຍະ ອອກຈາກເຮືອນໄປບວຊເປັນອນາຄາຣິກ ຍາພໍ່ຍາແມ່ໂປດອນຸຍາຕໃຫ້ລູກອອກໄປບວຊເປັນອນາຄາຣິກເຖີດ" ເມື່ອສຸທິນກລັນທບຸຕຣກ່າວຢ່າງນີ້ ມາຣດາບິດາຕອບວ່າ "ລູກສຸທິນ ເຈົ້າເປັນລູກຄົນດຽວ ເປັນທີ່ຮັກທີ່ຊອບໃຈຂອງພໍ່ແມ່ ຈະເຣີນເຕີບໃຫຍ່ມາດ້ວຍຄວາມສຸຂສະບາຍ ໄດ້ຮັບການລ້ຽງດູມາຢ່າງດີ ຄວາມທຸກຂ໌ຍາກຈັກຫນ້ອຍນຶ່ງລູກກໍຍັງບໍ່ຮູ້ຈັກ ເຖິງລູກຈະຕາຍໄປ ພໍ່ແມ່ກໍບໍ່ປຣາຖນາຈະຈາກ ແລ້ວເຫຕຸໃດ ພໍ່ແມ່ຈະຍອມໃຫ້ລູກຜູ້ຍັງມີຊີວິຕຢູ່ ອອກຈາກເຮືອນໄປບວຊເປັນອນາຄາຣິກລະ" ສຸທິນກລັນທບຸຕຣໄດ້ກ່າວກັບມາຣດາບິດາດັ່ງນີ້ເປັນຄັ້ງທີ ໒ ແລະຄັ້ງທີ ໓ ແມ່ນແຕ່ຄັ້ງທີ ໓ ມາຣດາບິດາກໍຕອບວ່າ "ລູກສຸທິນ ເຈົ້າເປັນລູກຄົນດຽວ ຯລຯ ເຫຕຸໃດພໍ່ແມ່ຈະຍອມໃຫ້ລູກຜູ້ຍັງມີຊີວິຕຢູ່ອອກຈາກເຮືອນໄປບວຊເປັນອນາຄາຣິກລະ"
[໔໗] ລຳດັບນັ້ນ ສຸທິນກລັນທບຸຕຣວິຕົກວ່າ ມາຣດາບິດາບໍ່ອນຸຍາຕໃຫ້ເຮົາບວຊແນ່ ຈຶ່ງນອນເທິງພື້ນທີ່ບໍ່ມີເຄື່ອງປູລາດ ນະ ທີ່ນັ້ນເອງ ຕັດສິນໃຈວ່າ ເຮົາຈັກຕາຍ ຫລືຈັກໄດ້ບວຊ ກໍທີ່ບ່ອນນີ້ແຫລະ ແລະແລ້ວເຂົາກໍອົດອາຫານໄປເລື້ອຍໆ ຕັ້ງແຕ່ ໑ ມື້ ໒ ມື້ ໓ ມື້ ໔ ມື້ ໕ ມື້ ໖ ມື້ ຈົນເຖິງ ໗ ມື້

ມາຣດາບິດາບໍ່ອນຸຍາຕ

[໔໗] ເຖິງປານນັ້ນ ມາຣດາບິດາຂອງເຂົາກໍຄົງຢືນຍັນວ່າ "ລູກສຸທິນ ເຈົ້າເປັນລູກຄົນດຽວ ເປັນທີ່ຮັກທີ່ຊອບໃຈຂອງພໍ່ແມ່ ຈະເຣີນເຕີບໃຫຍ່ມາດ້ວຍຄວາມສຸຂສະບາຍ ໄດ້ຮັບການລ້ຽງດູມາຢ່າງດີ ຄວາມທຸກຂ໌ຍາກຈັກໜ້ອຍນຶ່ງ ລູກກໍຍັງບໍ່ຮູ້ຈັກ ເຖິງລູກຈະຕາຍໄປ ພໍ່ແມ່ກໍບໍ່ປຣາຖນາຈະຈາກ ແລ້ວເຫຕຸໃດພໍ່ແມ່ຈະຍອມໃຫ້ລູກຜູ້ຍັງມີຊີວິຕຢູ່ອອກຈາກເຮືອນໄປບວຊເປັນອນາຄາຣິກໄດ້ລະ ລຸກຂຶ້ນເຖີດ ລູກສຸທິນ ຈົ່ງກິນ ຈົ່ງດື່ມ ຈົ່ງມ່ວນຊື່ນ ຈົ່ງພໍໃຈກິນດື່ມ ມ່ວນຊື່ນໃຊ້ສອຍໂພຄຊັພຍ໌ເຮັດບຸນເຖີດ ເຖິງຢ່າງໃດ ພໍ່ແມ່ກໍຈະບໍ່ອນຸຍາຕໃຫ້ລູກບວຊແນ່ນອນ" ເມື່ອມາຣດາບິດາກ່າວຢ່າງນີ້ ສຸທິນກລັນທບຸຕຣໄດ້ນິ່ງເສີຍເສັງ ມາຣດາບິດາໄດ້ຢືນຍັນກັບສຸທິນກລັນທບຸຕຣ ແມ່ນວ່າຄັ້ງທີ ໒ ແລະຄັ້ງທີ ໓ ວ່າ "ລູກສຸທິນ ເຈົ້າເປັນລູກຄົນດຽວ ເປັນທີ່ຮັກ ເປັນທີ່ຊອບໃຈຂອງພໍ່ແມ່ ຯລຯ ລູກສຸທິນ ຈົ່ງກິນ ຈົ່ງດື່ມ ຈົ່ງມ່ວນຊື່ນ ຈົ່ງພໍໃຈກິນດື່ມ ມ່ວນຊື່ນໃຊ້ສອຍໂພຄຊັພຍ໌ເຮັດບຸນເຖີດ ເຖິງຢ່າງໃດ ພໍ່ແມ່ກໍຈະບໍ່ອນຸຍາຕໃຫ້ລູກບວຊແນ່" ສຸທິນກລັນທບຸຕຣກໍໄດ້ນິ່ງເປັນຄັ້ງທີ ໓

## ພວກເພື່ອນຊ່ວຍເຈຣຈາ

ຕໍ່ມາ ພວກເພື່ອນຂອງສຸທິນກລັນທບຸຕຣ ພາກັນເຂົ້າໄປຫາເຖິງທີ່ຢູ່ ຄັນເຖິງແລ້ວໄດ້ປອບໃຈວ່າ "ສຸທິນເພື່ອນຮັກ ເພື່ອນເປັນລູກຄົນດຽວ ເປັນທີ່ຮັກທີ່ຊອບໃຈຂອງພໍ່ແມ່ ຈະເຣີນເຕີບໃຫຍ່ມາດ້ວຍຄວາມສຸຂສະບາຍ ໄດ້ຮັບການລ້ຽງດູມາຢ່າງດີ ຄວາມທຸກຂ໌ຍາກຈັກໜ້ອຍນຶ່ງ ເພື່ອນກໍຍັງບໍ່ຮູ້ຈັກ ເຖິງເພື່ອນຈະຕາຍໄປ ພໍ່ແມ່ກໍບໍ່ປຣາຖນາຈະຈາກ ແລ້ວເຫຕຸໃດພໍ່ແມ່ຈະຍອມໃຫ້ເພື່ອນຜູ້ຍັງມີຊີວິຕຢູ່ອອກຈາກເຮືອນໄປບວຊເປັນອນາຄາຣິກໄດ້ລະ ລຸກຂຶ້ນເຖີດເພື່ອນຮັກ ເພື່ອນຈົ່ງກິນ ຈົ່ງດື່ມ ຈົ່ງມ່ວນຊື່ນ ພໍໃຈກິນ ດື່ມ ມ່ວນຊື່ນ ໃຊ້ສອຍໂພຄຊັພຍ໌ເຮັດບຸນເຖີດ ເຖິງຈະຢ່າງໃດ ພໍ່ແມ່ກໍບໍ່ອນຸຍາຕໃຫ້ເພື່ອນບວຊແນ່" ເມື່ອພວກເພື່ອນກ່າວຢ່າງນີ້ ສຸທິນກລັນທບຸຕຣກໍໄດ້ແຕ່ນິ່ງເສີຍ ພວກເພື່ອນໄດ້ປອບໃຈສຸທິນກລັນທບຸຕຣເປັນຄັ້ງທີ ໒ ຯລຯ ເປັນຄັ້ງທີ ໓ ວ່າ "ສຸທິນເພື່ອນຮັກ ເພື່ອນເປັນລູກຄົນດຽວ ເປັນທີ່ຮັກທີ່ຊອບໃຈຂອງພໍ່ແມ່ ຯລຯ ພໍ່ແມ່ກໍບໍ່ອນຸຍາຕໃຫ້ເພື່ອນບວຊແນ່ນອນ" ສຸທິນກລັນທບຸຕຣກໍໄດ້ນິ່ງເສີຍເປັນຄັ້ງທີ ໓

[໔໘] ຕໍ່ມາ ພວກສະຫາຍພາກັນເຂົ້າໄປຫາມາຣດາບິດາຂອງສຸທິນກລັນທບຸຕຣເຖິງທີ່ຢູ່ ກ່າວວ່າ "ຍາພໍ່ຍາແມ່ຂະນ້ອຍ ສຸທິນນອນເທິງພື້ນທີ່ບໍ່ມີເຄື່ອງປູລາດ ຕັດສິນໃຈວ່າເຮົາຈັກຕາຍ ຫລືຈັກໄດ້ບວຊ ກໍທີ່ບ່ອນນີ້ແຫລະ ຖ້າຍາພໍ່ຍາແມ່ບໍ່ຍອມໃຫ້ເຂົາບວຊ ເຂົາຈັກຕາຍ ນະ ທີ່ບ່ອນນັ້ນແນ່ນອນ ແຕ່ຖ້າຍອມໃຫ້ເຂົາອອກບວຊ ຍາພໍ່ຍາແມ່ ກໍຍັງຈະໄດ້ພົບເຫັນເຂົາ ແມ່ນບວຊແລ້ວ ຖ້າບໍ່ຍິນດີຈະບວຊຢູ່ຕໍ່ໄປ ເຂົາຈະມີທາງໄປທີ່ໃດອື່ນລະ ຈະຕ້ອງກັບມາທີ່ນີ້ແຫລະ ອນຸຍາຕໃຫ້ເຂົາບວຊ

ເຖີດຂະນ້ອຍ" ມາຣດາບິດາຂອງສຸທິນຈຶ່ງກ່າວວ່າ "ລູກທັງຫລາຍ ພໍ່ແລະແມ່ອະນຸຍາດໃຫ້ເຂົາບວຊໄດ້"

## ສຸທິນກລັນທບຸຕຣອອກບວຊ

ຕໍ່ມາ ພວກເພື່ອນພາກັນເຂົ້າໄປຫາເຂົາເຖິງທີ່ຢູ່ ຄັນເຖິງແລ້ວໄດ້ກ່າວກັບສຸທິນກລັນທບຸຕຣດັ່ງນີ້ວ່າ "ລຸກຂຶ້ນເຖີດສຸທິນເພື່ອນຮັກ ມາຣດາບິດາອະນຸຍາດໃຫ້ເພື່ອນບວຊແລ້ວ"

[໓໐] ທັນໃດນັ້ນ ພໍສຸທິນກລັນທບຸຕຣໄດ້ຊາບວ່າ ມາຣດາບິດາອະນຸຍາດໃຫ້ບວຊ ກໍເບີກບານດີໃຈຫລາຍ ລຸກຂຶ້ນມາໃຊ້ຝ່າມືເຊັດຕົວ ບໍາຣຸງກໍາລັງຢູ່ ໔-໕ ມື້ ແລ້ວໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຄັນເຖິງແລ້ວໄດ້ຖວາຍບັງຄົມພຣະຜູ້ມີພຣະພາຄແລ້ວນັ່ງລົງ ນະ ທີ່ສົມຄວຣ ສຸທິນກລັນທບຸຕຣຜູ້ນັ່ງ ນະ ທີ່ສົມຄວຣແລ້ວໄດ້ຂາບທູລພຣະຜູ້ມີພຣະພາຄ ດັ່ງນີ້ວ່າ "ມາຣດາບິດາອະນຸຍາດໃຫ້ຂ້າພຣະພຸທທເຈົ້າອອກຈາກເຮືອນມາບວຊເປັນອະນາຄາຣິກແລ້ວ ຂໍພຣະຜູ້ມີພຣະພາຄໄດ້ໂປຣດບວຊໃຫ້ຂ້າພຣະພຸທທເຈົ້າດ້ວຍເຖີດ ພຣະພຸທທເຈົ້າຂ້າ" ສຸທິນກລັນທບຸຕຣໄດ້ຮັບການບັນພະຊາອຸປສົມບົທໃນສໍານັກຂອງພຣະພຸທທເຈົ້າ ເມື່ອບວຊໄດ້ບໍ່ດົນ ທ່ານພຣະສຸທິນໄດ້ຖືທຸດົງຄວັຕຣດັ່ງນີ້ ຄືຢູ່ປ່າເປັນວັຕຣ ໑ ທຽວບິນທບາຕເປັນວັຕຣ ໑ ໃຊ້ຜ້າບັງສຸກຸລເປັນວັຕຣ ໑ ທຽວບິນທບາຕໄປຕາມລໍາດັບເຮືອນເປັນວັຕຣ ໑ ພັກອາສັຍຢູ່ໃກ້ຫມູ່ບ້ານຊາວວັຊຊີຕາແສງນຶ່ງ

## ພຣະສຸທິນກລັນທບຸຕຣໄປຍ້ຽມບ້ານ

ສມັຍນັ້ນ ແຄວ້ນວັຊຊີເກີດເຂົ້າຢາກຫມາກແພງ ປະຊາຊົນມີຄວາມເປັນຢູ່ຍາກແຄ້ນ ໃຊ້ສລາກປັນສ່ວນຊື້ອາ ຫານ ລົ້ມຕາຍກັນກະດູກຂາວເກື່ອນ ຍາກທີ່ພຣະອຣິຍະຈະບິນທບາຕຍັງຊີພໄດ້ ທ່ານພຣະສຸທິນໄດ້ມີຄວາມຄິດດັ່ງນີ້ວ່າ ບັດນີ້ ແຄວ້ນວັຊຊີເກີດເຂົ້າຢາກຫມາກແພງ ປະຊາຊົນມີຄວາມເປັນຢູ່ຍາກ ແຄ້ນ ໃຊ້ສລາກປັນສ່ວນ ຊື້ອາຫານ ລົ້ມຕາຍກັນກະດູກຂາວເກື່ອນ ຍາກທີ່ພຣະອຣິຍະຈະບິນທບາຕຍັງຊີພໄດ້ ແຕ່ໃນກຸງເວສາລີ ເຮົາມີຍາຕຢູ່ຈໍານວນຫລາຍ ຊຶ່ງລ້ວນແຕ່ເປັນຄອບຄົວມັ່ງຄັ່ງມີຊັພຍ໌ມາກ ມີໂພຄະມາກ ມີເງິນມີທອງມາກ ມີເຄື່ອງປະດັບມາກ ມີຊັພຍ໌ແລະເຂົ້າເປືອກມາກ ດັ່ງນັ້ນ ເຮົາຄວຣຈະໄປອາສັຍພວກຍາຕຢູ່ ພ້ອມກັນນັ້ນ ພວກຍາຕກໍຈະອາສັຍເຮົາເຮັດບຸນຖວາຍທານ ພິກສຸທັງຫລາຍຈັກມີລາພແລະເຮົາກໍບໍ່ເດືອດຮ້ອນເຮື່ອງບິນທບາຕ ຄັ້ງນັ້ນ ທ່ານພຣະສຸທິນຈຶ່ງເກັບເສນາສນະຖືບາຕຣແລະຈີວອນແລ້ວຈາຣິກໄປທາງກຸງເວສາລີ ທຽວຈາຣິກໄປໂດຍລໍາດັບ ຈົນເຖິງກຸງເວສາລີ ຈຶ່ງໄດ້ພັກຢູ່ ນະ ກູຕາຄາຣສາລາ ປ່າມຫາວັນ ເຂຕກຸງເວສາລີນັ້ນ ບັນດາ

ຍາຕຂອງທ່ານ ພໍຊາບຂ່າວວ່າພຣະສຸທິນກລັນທບຸຕຣກັບມາກຸງເວສາລີ ຈຶ່ງນຳອາຫາຣ ໖໐ ຊຸດ ໄປຖວາຍ ທ່ານສລະອາຫາຣທັງໝົດຖວາຍພິກສຸທັງຫລາຍແລ້ວຄອງອັນຕຣວາສກຖືບາຕຣແລະຈີວອນເຂົ້າໄປບິນທບາຕ ທີ່ໝູ່ ບ້ານກລັນທຄາມໃນຕອນເຊົ້າ ທຽວບິນທບາຕໄປໃນໝູ່ບ້ານກລັນທຄາມຕາມລຳດັບເຮືອນ ຍ່າງຕຣົງໄປທາງບ້ານໂຍມບິດາ

[໓໑] ພໍດີຂນະນັ້ນ ທາສຍິງຂອງຍາຕກຳລັງຈະຖິ້ມຂນົມກຸມມາສຄ້າງຄືນ ທ່ານບອກທາສຍິງວ່າ "ຖ້າຈະຖິ້ມສິ່ງນັ້ນ ກໍຈົ່ງໃສ່ບາຕຣຂອງອາຕມາເຖີດ" ຂນະທີ່ທາສຍິງກຳລັງເທັ່ງຂນົມກຸມມາສຄ້າງຄືນລົງບາຕຣ ນາງຈື່ເຄົ້າມື ຕີນ ແລະນ້ຳສຽງຂອງພຣະສຸທິນໄດ້ ຈຶ່ງຮີບເຂົ້າໄປຫາມາຣດາຂອງທ່ານແລ້ວກ່າວວ່າ "ຍານາຍຂະນ້ອຍ ໂປດຊາບເຖີດວ່າ ພຣະສຸທິນບຸຕຣຍານາຍກັບມາແລ້ວ ຂະນ້ອຍ" ມາຣດາຂອງພຣະສຸທິນກ່າວວ່າ "ຖ້າທ່ານເວົ້າແມ່ນແທ້ ເຮົາຈະປົດປ່ອຍທ່ານໃຫ້ເປັນໄທ"

[໓໔] ຂນະທີ່ທ່ານພຣະສຸທິນກຳລັງນັ່ງພິງຝາເຮືອນແຫ່ງນຶ່ງສັນຂນົມກຸມມາສຄ້າງຄືນຢູ່ ພໍດີໂຍມບິດາຂອງທ່ານຍ່າງກັບມາຈາກວຽກ ໄດ້ເຫັນທ່ານກຳລັງນັ່ງສັນຂນົມກຸມມາສຄ້າງຄືນຢູ່ ຄັນເຫັນແລ້ວຈຶ່ງຕຣົງເຂົ້າໄປຫາເຖິງບ່ອນ ຄັນເຖິງແລ້ວໄດ້ກ່າວກັບທ່ານພຣະສຸທິນ ດັ່ງນີ້ວ່າ "ແມ່ນຫຍັງກັນລູກສຸທິນ ລູກສັນຂນົມກຸມມາສຄ້າງຄືນບໍ ລູກຄວຣໄປບ້ານຂອງລູກບໍ່ແມ່ນບໍ" ທ່ານພຣະສຸທິນຕອບວ່າ "ອາຕມາໄປທີ່ບ້ານຂອງໂຍມມາແລ້ວ ຂນົມກຸມມາສຄ້າງຄືນນີ້ກໍໄດ້ມາຈາກທີ່ບ້ານນັ້ນ" ທັນໃດນັ້ນ ບິດາຈັບແຂນທ່ານພຣະສຸທິນກ່າວວ່າ "ມາເຖີດລູກສຸທິນໄປບ້ານດ້ວຍກັນ" ທ່ານພຣະສຸທິນຈຶ່ງຍ່າງຕຣົງໄປບ້ານຂອງໂຍມບິດາ ຄັນເຖິງແລ້ວ ໄດ້ນັ່ງເທິງອາສນະທີ່ເຂົາຈັດຖວາຍ ບິດາຂອງທ່ານສຸທິນກ່າວວ່າ "ນິມົນຕ໌ທ່ານສັນເຖີດ" "ບໍ່ລະໂຍມ ວັນນີ້ອາຕມາສັນອິ່ມແລ້ວ" "ຂໍນິມົນຕ໌ຮັບສັນພັຕຕາຫາຣໃນມື້ອື່ນນີ້ເຖີດ" ທ່ານພຣະສຸທິນຮັບນິມົນຕ໌ໂດຍດຸສນີພາພ ແລ້ວກໍລຸກຈາກອາສນະຫລີກໄປ

## ບິດາວິງວອນໃຫ້ລາສິກຂາ

[໓໓] ໃນຄືນນັ້ນ ມາຣດາຂອງພຣະສຸທິນສັ່ງໃຫ້ເອົາມູລໂຄສົດມາທາບທາພື້ນດິນແລ້ວ ແບ່ງຊັພຍ໌ອອກເປັນ ໔ ກອງ ຄື ເງິນກອງນຶ່ງ ຄຳກອງນຶ່ງ ເປັນກອງໃຫຍ່ທໍ່ໆກັນ ສູງທ້ວມສີສະ ຄົນຢືນຢູ່ຟາກພີ້ຈະເບິ່ງບໍ່ເຫັນຄົນ ຢືນຢູ່ຟາກພຸ້ນ ຄົນຢືນຢູ່ຟາກພຸ້ນຈະເບິ່ງບໍ່ເຫັນຄົນຢືນຢູ່ຟາກພີ້ ໃຊ້ເສື່ອລຳແພນປົດກອງຊັພຍ໌ໄວ້ ທາງກາງຈັດອາສນະໃຊ້ມ່ານລ້ອມເປັນວົງ ແລ້ວຮຽກອດີຕພັຣຍາຂອງທ່ານພຣະສຸທິນມາສັ່ງວ່າ "ລູກຍິງ ທ່ານຈົ່ງແຕ່ງກາຍດ້ວຍອາພອນທີ່ລູກສຸທິນເຄີຍຮັກໃຄ່ຊອບໃຈ" ລູກໃພ້ຮັບຄຳສັ່ງແມ່ຍ່າໂດຍດີ

[໓໔] ພໍຮຸ່ງເຊົ້າ ທ່ານພຣະສຸທິນຄອງອັນຕຣວາສກຖືບາຕຣແລະຈີວອນເຂົ້າໄປເຖິງເຮືອນໂຍມບິດາ ຄັນເຖິງແລ້ວ ໄດ້ນັ່ງເທິງອາສນະທີ່ເຂົາຈັດຖວາຍ ລຳດັບນັ້ນ ໂຍມບິດາຂອງທ່ານເຂົ້າໄປຫາແລ້ວ ໃຫ້ ຄົນ ເປີດກອງຊັພຍ໌ອອກ ກ່າວວ່າ "ລູກສຸທິນ ນີ້ຄືຊັພຍ໌ຝ່າຍມາຣດາເປັນສົມບັຕຝ່າຍຍິງທີ່ໄດ້ ຮັບມາທາງຝ່າຍມາຣດາ ຂອງພໍ່ມີອີກຕ່າງ ຫາກ ສ່ວນຂອງປູ່ອີກຕ່າງຫາກ ລູກສຸທິນຈົ່ງກັບມາ ເປັນຄຣືຫັສຖ໌ເຖີດ ຈະໄດ້ໃຊ້ສອຍຊັພຍ໌ສົມບັຕແລະເຮັດບຸນ" ທ່ານພຣະສຸທິນຕອບວ່າ "ໂຍມ ອາຕມາບໍ່ອາຈບໍ່ສາມາດ ອາຕມາຍັງພໍໃຈປະພຶດພຣົມຈັນຍ໌ຢູ່" ໂຍມບິດາຂອງພຣະສຸທິນວິງວອນ ເປັນຄັ້ງທີ ໒ ແລະເປັນຄັ້ງທີ ໓ ວ່າ "ລູກສຸທິນ ນີ້ຄືຊັພຍ໌ຝ່າຍມາຣດາເປັນ ສົມບັຕຝ່າຍຍິງທີ່ໄດ້ ຮັບມາທາງຝ່າຍມາຣດາ ຂອງພໍ່ມີອີກຕ່າງ ຫາກ ສ່ວນຂອງປູ່ອີກຕ່າງຫາກ ລູກສຸທິນຈົ່ງກັບມາ ເປັນຄຣືຫັສຖ໌ເຖີດ ຈະໄດ້ໃຊ້ສອຍຊັພຍ໌ສົມບັຕແລະ ເຮັດບຸນ" ທ່ານພຣະສຸທິນ ຕອບວ່າ "ອາຕມາຂໍເວົ້ານຳແດ່ ຖ້າໂຍມບໍ່ຂັດຂ້ອງ" ບິດາຂອງທ່ານຕອບວ່າ "ນິມົນຕ໌ເວົ້າເຖີດ ລູກສຸທິນ" ທ່ານພຣະສຸທິນກ່າວວ່າ "ຖ້າຢ່າງນັ້ນ ໂຍມພໍ່ຈົ່ງສັ່ງໃຫ້ເຮັດໄຖ້ປ່ານນ້ອຍໃຫຍ່ໆ ບັນຈຸເງິນຄຳໃຫ້ ເຕັມ ບັນທຸກກວຽນໄປ ແລ້ວໂຍນລົງກາງແມ່ນ້ຳຄົງຄາ ເພາະຫຍັງ ກໍເພາະວ່າໂຍມພໍ່ຈະບໍ່ ຕ້ອງຢ້ານ ບໍ່ຕ້ອງຫວາດຣະແວງ ບໍ່ຕ້ອງຂົນຫົວລຸກ ບໍ່ຕ້ອງມີການເບິ່ງແຍງຮັກສາ ຊຶ່ງມີສາເຫຕຸມາ ຈາກຊັພຍ໌ນັ້ນເລີຍ" ເມື່ອທ່ານພຣະສຸທິນກ່າວຢ່າງນີ້ ໂຍມບິດາຂອງທ່ານເສັຽໃຈດ້ອຍຄິດວ່າ ລູກສຸ ທິນກ່າວຢ່າງນີ້ໄດ້ຢ່າງໃດ

[໓໕] ຕໍ່ມາ ບິດາຂອງພຣະສຸທິນຮຽກອດີຕພັຣຍາຂອງທ່ານມາສັ່ງວ່າ "ລູກຍິງ ເຈົ້າເປັນທີ່ຮັກໃຄ່ພໍ ໃຈ ບາງທີລູກສຸທິນຈະເຊື່ອເຈົ້າແດ່" ທັນໃດນັ້ນ ນາງຈຶ່ງຈັບຕີນທັງ ໒ ຂອງພຣະສຸທິນ ພ້ອມກັບ ຖາມວ່າ "ນ່ອມອ້າຍ ນາງອັປສອນພວກໃດເດນໍ ຜູ້ເປັນຕົ້ນເຫຕຸໃຫ້ນ່ອມອ້າຍປະພຶດພຣົມຈັນຍ໌" ທ່ານພຣະສຸທິນຕອບວ່າ "ນ້ອງຍິງ ອາຕມາບໍ່ໄດ້ປະພຶດພຣົມຈັນຍ໌ເພາະນາງອັປສອນເປັນເຫຕຸ" ນາງເສັຽໃຈດ້ອຍຄິດວ່າ ອັນນີ້ ເປັນມື້ທຳອິດທີ່ນ່ອມອ້າຍສຸທິນຮຽກເຮົາວ່າ 'ນ້ອງຍິງ' ຈຶ່ງລົ້ມສລົບລົງບ່ອນນັ້ນເອງ ທ່ານພຣະສຸທິນບອກໂຍມບິດາວ່າ "ໂຍມພໍ່ ຖ້າໂຍມຈະຖວາຍໂພຊນະກໍຈົ່ງ ຖວາຍ ຢ່າເຮັດໃຫ້ອາຕມາລຳບາກໃຈເລີຍ" ບິດາຂອງທ່ານຈຶ່ງນິມົນຕ໌ໃຫ້ສັນ ຈາກນັ້ນມາຣດາບິດາ ຂອງທ່ານປະເຄີນຂອງ ຄ້ຽວຂອງສັນອັນປານີຕ ຈົນອີ່ມຫນຳ ຈາກນັ້ນມາຣດາບອກພຣະສຸທິນຜູ້ສັນ ແລ້ວ ວ່າ "ລູກສຸທິນ ຕະກູນເຮົານີ້ມັ່ງຄັ່ງມີຊັພຍ໌ຫລາຍ ມີໂພຄະຫລາຍ ມີເງິນມີຄຳຫລາຍ ມີ ເຄື່ອງປະດັບຫລາຍ ມີຊັພຍ໌ແລະເຂົ້າເປືອກຫລາຍ ທ່ານຄວຣກັບມາເປັນຄຣືຫັສຖ໌ ຈະໄດ້ໃຊ້ສອຍ ຊັພຍ໌ສົມບັຕແລະ ເຮັດບຸນ ມາເຖີດລູກສຸທິນ ກັບມາເປັນຄຣືຫັສຖ໌ເຖີດ ຈະໄດ້ໃຊ້ສອຍຊັພຍ໌

ສົມບັຕແລະເຮັດບຸນ" ທ່ານພຣະສຸທິນຕອບວ່າ "ໂຍມແມ່ ອາຕມາບໍ່ອາຈບໍ່ສາມາດ ອາຕມາຍັງພໍໃຈປະພຶດພຣົມຈັນຍ໌ຢູ່" ມາຣດາພຣະສຸທິນອິງ ວອນແມ່ນຄັ້ງທີ ໔ ຄັ້ງທີ ໓ ນາງກ່າວວ່າ "ລູກສຸທິນ ຕະກູນເຮົານີ້ມັ່ງຄັ່ງມີຊັພຍ໌ຫລາຍ ມີໂພຄະຫລາຍ ມີເງິນມີທອງຫລາຍ ມີເຄື່ອງປະດັບຫລາຍ ມີຊັພຍ໌ແລະເຂົ້າເປືອກຫລາຍ ລູກຈົ່ງໃຫ້ຜູ້ສືບເຊື້ອສາຍໄວ້ ເຈົ້າລິຈສອິຈະໄດ້ບໍ່ຮິບເອົາມໍຣດົກຂອງເຮົາທີ່ຂາດຜູ້ສືບສກຸລ" "ທ່ານໂຍມ ເຣື້ອງນີ້ອາຕມາພໍຈະເຮັດໄດ້"

"ເວລານີ້ ລູກພັກຢູ່ທີ່ໃດ" "ອາຕມາພັກຢູ່ທີ່ປ່າມຫາວັນ" ພຣະສຸທິນຕອບແລ້ວລຸກຈາກອາສນະຫລີກໄປ

## ພຣະສຸທິນເສພເມຖຸນທັມ

[໓໓] ຫລັງຈາກນັ້ນ ມາຣດາຂອງທ່ານພຣະສຸທິນຮຽກອດີຕພັຣຍາພຣະສຸທິນມາສັ່ງວ່າ "ລູກຍິງ ເມື່ອເຖິງເວລາທີ່ເຈົ້າມີຣະດູ ຕ່ອມໂລຫິຕເກີດມີແກ່ເຈົ້າ ເຈົ້າຕ້ອງບອກແມ່" ນາງຮັບຄຳ ຕໍ່ມາເມື່ອນາງມີຣະດູ ຕ່ອມໂລຫິຕເກີດຂຶ້ນຈຶ່ງບອກແມ່ຍ່າວ່າ "ຂະນ້ອຍມີຣະດູ ຕ່ອມໂລຫິຕເກີດແລ້ວ" ມາຣດາກ່າວວ່າ "ລູກຍິງ ຖ້າຢ່າງນັ້ນ ເຈົ້າຈົ່ງແຕ່ງກາຍດ້ວຍອາພອນທີ່ລູກສຸທິນເຄີຍຮັກໃຄ່ຊອບໃຈເຖີດ" ນາງກໍປະຕິບັດຕາມຄຳຂອງແມ່ຍ່າ ຕໍ່ມາ ມາຣດາພາລູກໃພ້ໄປຫາທ່ານພຣະສຸທິນທີ່ປ່າມຫາວັນ ກ່າວວ່າ "ລູກສຸທິນ ຕະກູນເຮົາມັ່ງຄັ່ງມີຊັພຍ໌ຫລາຍ ມີໂພຄະຫລາຍ ມີເງິນມີທອງຫລາຍ ມີເຄື່ອງປະດັບຫລາຍ ມີຊັພຍ໌ແລະເຂົ້າເປືອກຫລາຍ ລູກຄວຣກັບມາເປັນ ຄຣືຫັສຖ໌ ຈະໄດ້ໃຊ້ສອຍຊັພຍ໌ສົມບັຕແລະເຮັດບຸນ" ພຣະສຸທິນຕອບວ່າ "ອາຕມາບໍ່ອາຈ ບໍ່ສາມາດ ອາຕມາຍັງພໍໃຈປະພຶດພຣົມຈັນຍ໌ຢູ່" ມາຣດາພຣະສຸທິນອິງວອນເປັນຄັ້ງທີ ໔ ແລະທີ ໓ ວ່າ "ລູກສຸທິນ ຕະກູນເຮົານີ້ມັ່ງຄັ່ງ ຯລຯ ມີຊັພຍ໌ແລະເຂົ້າເປືອກຫລາຍ ລູກຈົ່ງໃຫ້ຜູ້ສືບເຊື້ອສາຍໄວ້ ເຈົ້າລິຈສອິຈະໄດ້ບໍ່ຮິບເອົາມໍຣດົກຂອງເຮົາທີ່ຂາດຜູ້ສືບສກຸລ" ພຣະສຸທິນຕອບວ່າ "ໂຍມ ເຣື້ອງນີ້ອາຕມາພໍຈະເຮັດໄດ້" ແລ້ວຈັບແຂນອດີຕພັຣຍາ ພາເຂົ້າປ່າມຫາວັນ ເພາະຍັງບໍ່ໄດ້ບັນຍັຕສິກຂາບົທຈຶ່ງເຫັນວ່າບໍ່ມີໂທສ ໄດ້ເສພເມຖຸນທັມກັບອດີຕພັຣຍາ ເຖິງ ໓ ຄັ້ງ ນາງຕັ້ງຄັນພ໌ເພາະເຫຕຸນີ້

## ພຣະວິນັຍປິດົກ ມຫາວິພັງຄ໌ [໑. ປາຣາຊິກກັນຫ໌] ປາຣາຊິກສິກຂາບົທທີ ໑ ສຸທິນນພານວາຣ ທວຍເທພກະຈາຍຂ່າວ

ທວຍເທພຊັ້ນພຸມມະ ກະຈາຍຂ່າວວ່າ ທ່ານຜູ້ຈະເຣີນ ພິກສຸສົງຂ໌ບໍ່ເຄີຍມີສນຽດບໍ່ເຄີຍມີໂທສ ພຣະສຸທິນກລັນທບຸຕຣ ກໍ່ສນຽດ ກໍ່ໂທສຂຶ້ນແລ້ວ ທວຍເທພຊັ້ນຈາຕຸມມຫາຣາຊສດັບສຽງ

ຂອງທວຍເທພຊັ້ນພຸມມະແລ້ວ ໄດ້ກະຈາຍຂ່າວຕໍ່ໄປ ຯລຯ ທວຍເທພຊັ້ນດາວດຶງສ໌ ຯລຯ ທວຍເທພຊັ້ນຍາມາ ຯລຯ ທວຍເທພຊັ້ນດຸສິຕ ຯລຯ ທວຍເທພຊັ້ນນິມມານຣດີ ຯລຯ ທວຍເທພຊັ້ນປຣນິມມິຕວສວັຕດີ ຯລຯ ທວຍເທພທີ່ນັບເນື່ອງໃນໝູ່ພຣົມສດັບສຽງ ແລ້ວກໍກະຈາຍຂ່າວກັນຕໍ່ໄປວ່າ ທ່ານຜູ້ຈະເຣີນ ພິກສຸສົງຄ໌ບໍ່ເຄີຍມີສນຽດ ບໍ່ເຄີຍມີໂທສ ພຣະສຸທິນກລັນທບຸຕຣກໍ່ສນຽດ ກໍໂທສຂຶ້ນແລ້ວ ພຽງບຶດ ດຽວເທົ່ານັ້ນ ສຽງປ່າວປະກາດໄດ້ກະຈາຍຂຶ້ນໄປເຖິງພຣົມໂລກດ້ວຍປະກາຣດັ່ງນີ້

ຕໍ່ມາ ອດີຕພັຣຍາຂອງພຣະສຸທິນຄັນພ໌ແກ່ຈຶ່ງຄອດບຸຕຣ ພວກເພື່ອນຂອງພຣະສຸທິນຕັ້ງຊື່ເດັກ ຄືນນັ້ນວ່າ ເດັກຊາຍພີຊກະ ຮຽກອດີຕພັຣຍາຂອງພຣະສຸທິນວ່າ ພີຊກມາຣດາ ຮຽກພຣະສຸທິນວ່າພີຊກບິດາ ຕໍ່ມາທັງມາຣດາທັງບຸຕຣໄດ້ອອກຈາກເຮືອນໄປບວຊເປັນອນາຄາຣິກ ໄດ້ສໍາເຣັຈເປັນພຣະອຣຫັນຕ໌

### ພຣະສຸທິນເກີດຄວາມເດືອດຮ້ອນໃຈ

[໑໗] ຕໍ່ມາ ພຣະສຸທິນເກີດຄວາມກຸ້ມໃຈເດືອດຮ້ອນໃຈວ່າ "ບໍ່ແມ່ນລາພຂອງເຮົານໍ ເຮົາບໍ່ມີລາພນໍ ເຮົາໄດ້ຊົ່ວແລ້ວນໍ ເຮົາບໍ່ໄດ້ດີແລ້ວນໍ ເຖິງຈະເຂົ້າມາບວຊໃນພຣະທັມວິນັຍທີ່ພຣະຜູ້ມີພຣະພາຄຕຣັສໄວ້ດີແລ້ວ ກໍຍັງບໍ່ສາມາດປະພຶດພຣົມຈັນຍ໌ໃຫ້ບໍຣິສຸດທ໌ບໍຣິບູຣນ໌ໄດ້ຕລອດຊີວິຕ" ເພາະຄວາມກຸ້ມໃຈ ເດືອດຮ້ອນໃຈນັ້ນ ທ່ານຈຶ່ງຈ່ອຍຜອມ ໝອງເສົ້າ ຫລ່າເຫລືອງ ເສັ້ນເອັນຂຶ້ນເຕັມໄປໝົດ ມີເຣື້ອງໃນໃຈ ໃຈຫົດຫູ່ ເປັນທຸກຂ໌ ເສັຽໃຈ ເດືອດຮ້ອນໃຈ ເສົ້າຊຶມ

[໑໘] ຝ່າຍພິກສຸຜູ້ເປັນເພື່ອນຂອງພຣະສຸທິນ ກ່າວກັບທ່ານສຸທິນວ່າ "ທ່ານສຸທິນ ເມື່ອກ່ອນທ່ານມີຜິວພັນ ເຄັ່ງຕຶງ ອຸ່ມຊຶ່ນ ໜ້າຕາສົດໃສ ມີນໍ້າມີນວລ ແຕ່ບັດນີ້ ເຫັນທ່ານຈ່ອຍຜອມ ໝອງເສົ້າ ຫລ່າເຫລືອງ ເສັ້ນເອັນຂຶ້ນເຕັມໄປໝົດ ມີເຣື້ອງໃນໃຈ ໃຈຫົດຫູ່ ເປັນທຸກຂ໌ ເສັຽໃຈເດືອດຮ້ອນໃຈ ເສົ້າຊຶມ ທ່ານບໍ່ຍິນດີຈະປະພຶດພຣົມຈັນຍ໌ແລ້ວຕິບໍ" ພຣະສຸທິນຕອບວ່າ "ທ່ານທັງຫລາຍ ຄວາມຈິງບໍ່ແມ່ນຜູ້ຂ້າຈະບໍ່ຍິນດີປະພຶດ ພຣົມຈັນຍ໌ ຜູ້ຂ້າມີບາປກັມທີ່ທໍາໄວ້ ຄື ໄດ້ເສພເມຖຸນທັມກັບອດີຕພັຣຍາ ຜູ້ຂ້າຈຶ່ງເກີດຄວາມກຸ້ມໃຈເດືອດຮ້ອນໃຈວ່າ ບໍ່ແມ່ນລາພຂອງເຮົານໍ ເຮົາບໍ່ມີລາພນໍ ເຮົາໄດ້ຊົ່ວແລ້ວນໍ ເຮົາບໍ່ໄດ້ດີນໍ ເຖິງຈະເຂົ້າມາບວຊໃນພຣະທັມວິນັຍທີ່ພຣະຜູ້ມີພຣະພາຄຕຣັສໄວ້ດີແລ້ວ ກໍຍັງບໍ່ສາມາດຈະປະພຶດພຣົມຈັນຍ໌ ໃຫ້ບໍຣິສຸດທ໌ບໍຣິບູຣນ໌ໄດ້ຕລອດຊີວິຕ" ພິກສຸຜູ້ເປັນເພື່ອນກ່າວວ່າ "ເປັນຈິງແທ້ທ່ານສຸທິນ ກາຣທີ່ທ່ານເຂົ້າມາບວຊໃນພຣະທັມ

ວິນັຍທີ່ພຣະຜູ້ມີພຣະພາຄຕຣັສໄວ້ດີແລ້ວ ແຕ່ບໍ່ສາມາດຈະປະພຶດພຣົມຈັນຍ໌ໃຫ້ບໍຣິສຸດທ໌ບໍຣິບູຣນ໌ໄດ້ຕລອດຊີວິຕ ກໍພໍທີ່ຈະເຮັດໃຫ້ກຸ້ມໃຈ ເດືອດຮ້ອນໃຈໄດ້ ພຣະຜູ້ມີພຣະພາຄຊົງສະແດງທັມໄວ້ໂດຍປະກາຣຕ່າງໆ ເພື່ອຄາຍຄວາມກຳຫນັດ ບໍ່ແມ່ນເພື່ອຄວາມກຳຫນັດ ເພື່ອຄວາມພາກໄປ ບໍ່ແມ່ນເພື່ອຄວາມປະກອບໄວ້ ເພື່ອຄວາມບໍ່ ຖືຫມັ້ນ ບໍ່ແມ່ນເພື່ອຄວາມຖືຫມັ້ນ ບໍ່ແມ່ນບໍ? ເມື່ອພຣະຜູ້ມີພຣະພາຄຊົງສະແດງທັມເພື່ອຄາຍຄວາມກຳຫນັດ ທ່ານກໍຍັງຈະຄິດເພື່ອຄວາມກຳຫນັດ ຊົງສະແດງທັມເພື່ອຄວາມພາກໄປ ທ່ານກໍຍັງຈະຄິດເພື່ອຄວາມປະກອບໄວ້ ຊົງສະແດງທັມເພື່ອຄວາມບໍ່ຖືຫມັ້ນ ທ່ານກໍຍັງຈະຄິດເພື່ອມີຄວາມຖືຫມັ້ນ ພຣະຜູ້ມີພຣະພາຄຊົງສະແດງ ທັມໂດຍປະກາຣຕ່າງໆ ເພື່ອຄາຍຖິ້ມຣາຄະ ເພື່ອສ່ວາງຄວາມເມົາ ເພື່ອດັບຄວາມຫິວ ເພື່ອຖອນຄວາມອາລັຍ ເພື່ອຕັດວັຕຕະ ເພື່ອຄວາມສິ້ນຕັນຫາ ເພື່ອຄາຍຄວາມກຳຫນັດ ເພື່ອດັບທຸກຂ໌ ເພື່ອນິພພານ ບໍ່ແມ່ນບໍ ພຣະຜູ້ມີພຣະພາຄຕຣັສບອກການລະກາມ ການກຳຫນົດຮູ້ຄວາມສຳຄັນໃນກາມ ການກຳຈັດຄວາມຫິວໃນກາມ ການເພີກຖອນຄວາມສິ້ນໄປໃນກາມ ການຣະງັບຄວາມກັດກຸ້ມເພາະກາມໄວ້ໂດຍປະກາຣຕ່າງໆ ບໍ່ແມ່ນບໍ ການກະທຳຂອງທ່ານນັ້ນ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຕາມຄວາມເປັນຈິງແລ້ວ ມັນກັບຈະເຮັດໃຫ້ຄົນທີ່ບໍ່ເຫລື້ອມໃສກໍບໍ່ເຫລື້ອມໃສຕໍ່ໄປເລີຍ ຄົນທີ່ເຫລື້ອມໃສຢູ່ແລ້ວບາງພວກກໍຈະກາຍເປັນອື່ນໄປ"

[໓໙] ຄັນພິກສຸຜູ້ເປັນເພື່ອນເຫລົ່ານັ້ນຕຳຫນິພຣະສຸທິນໂດຍປະກາຣຕ່າງໆ ແລ້ວນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

## ຊົງປະຊຸມສົງຂ໌ບັນຍັຕສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະສຸທິນວ່າ "ສຸທິນ ຊາບວ່າ ທ່ານເສພເມຖຸນທັມກັບອດີຕພັຣຍາແມ່ນແທ້ບໍ" ພຣະສຸທິນທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄຊົງຕຳຫນິວ່າ "ໂມຂບຸຣຸສ ການກະທຳຂອງທ່ານບໍ່ສົມຄວຣ ບໍ່ຄ້ອຍຕາມ ບໍ່ເຫມາະສົມ ບໍ່ແມ່ນກິຈຂອງສມນະ ໃຊ້ບໍ່ໄດ້ ບໍ່ຄວຣກະທຳເລີຍ ທ່ານບວຊໃນທັມວິນັຍທີ່ເຮົາກ່າວດີແລ້ວ ຈັ່ງໃດຈຶ່ງບໍ່ສາມາດປະພຶດພຣົມຈັນຍ໌ໃຫ້ບໍຣິສຸດທ໌ບໍຣິບູຣນ໌ໄດ້ຕລອດຊີວິຕລະ ເຮົາສະແດງທັມໂດຍປະກາຣຕ່າງໆ ເພື່ອຄາຍຄວາມກຳຫນັດ ບໍ່ແມ່ນເພື່ອຄວາມກຳຫນັດ ເພື່ອຄວາມພາກ ບໍ່ແມ່ນເພື່ອຄວາມປະກອບໄວ້ ເພື່ອ

ຄວາມບໍ່ຖືໝັ້ນ ບໍ່ແມ່ນເພື່ອຄວາມຖືໝັ້ນ ບໍ່ແມ່ນບໍ ເມື່ອເຮົາສະແດງທັມເພື່ອຄາຍຄວາມກຳໜັດ ທ່ານກໍຍັງຈະຄິດເພື່ອຄວາມກຳໜັດ ເຮົາສະແດງທັມເພື່ອຄວາມພາກ ທ່ານກໍຍັງຈະຄິດເພື່ອຄວາມປະກອບໄວ້ ເຮົາສະແດງທັມເພື່ອຄວາມບໍ່ຖືໝັ້ນ ທ່ານກໍຍັງຈະຄິດເພື່ອມີຄວາມຖືໝັ້ນ ເຮົາສະແດງທັມໂດຍປະການຕ່າງໆ ເພື່ອຄາຍຖິ້ມຣາຄະ ເພື່ອສ່ວາງຄວາມເມົາ ເພື່ອດັບຄວາມຫິວ ເພື່ອຖອນຄວາມອາລັຍ ເພື່ອຕັດວັຕຕະ ເພື່ອຄວາມສິ້ນຕັນຫາ ເພື່ອຄາຍຄວາມກຳໜັດ ເພື່ອດັບທຸກຂ໌ ເພື່ອນິພພານ ບໍ່ແມ່ນບໍ ເຮົາບອກການລະກາມ ການກຳໜົດຮູ້ຄວາມສຳຄັນໃນກາມ ການກຳຈັດຄວາມຫິວໃນກາມ ການເພີກຖອນຄວາມສິ້ນໄປໃນກາມ ການຣະງັບຄວາມກັດກຸ້ມເພາະກາມໄວ້ໂດຍປະການຕ່າງໆ ບໍ່ແມ່ນບໍ ໂມຊບຸຣຸສ ທ່ານສອດອົງຄຊາຕເຂົ້າປາກອສໍຣພິສຮ້າຍເສັຽຍັງດີກວ່າສອດອົງຄຊາຕເຂົ້າອົງຄ໌ກຳເນີດສຕຣີ ສອດອົງຄຊາຕເຂົ້າປາກງູເຫົ່າເສັຽຍັງດີກວ່າສອດອົງຄຊາຕເຂົ້າ ອົງຄ໌ກຳເນີດສຕຣີ ສອດອົງຄຊາຕເຂົ້າຫລຸມຖ່ານໄຟເສັຽຍັງດີກວ່າສອດອົງຄຊາຕເຂົ້າອົງຄ໌ກຳເນີດສຕຣີ ເພາະຫຍັງລະ ເພາະຜູ້ສອດອົງຄຊາຕເຂົ້າປາກອສໍຣພິສຮ້າຍເປັນຕົ້ນ ເພິງເຖິງຄວາມຕາຍຫລືທຸກຂ໌ປາງຕາຍເພາະການກະທຳນັ້ນເປັນເຫຕຸ ຫລັງຈາກຕາຍແລ້ວກໍບໍ່ຕ້ອງໄປບັງເກີດໃນອບາຍ ທຸຄຕິ ວິນິບາຕ ນຣົກ ສ່ວນຜູ້ສອດອົງຄຊາຕເຂົ້າ ອົງຄ໌ກຳເນີດສຕຣີ ຫລັງຈາກຕາຍແລ້ວຕ້ອງໄປບັງເກີດໃນອບາຍທຸຄຕິ ວິນິບາຕ ນຣົກ ໂມຊບຸຣຸສ ໃນການທີ່ທ່ານເສພອສັທທັມ ຊຶ່ງເປັນປະເວນີຂອງຊາວບ້ານ ມາຣຍາທຂອງຄົນຊັ້ນຕ່ຳ ກິຣິຍາຊົ່ວຫຍາບ ມີນ້ຳເປັນທີ່ສຸດ ເປັນກິຈທີ່ຈະຕ້ອງກະທຳໃນທີ່ລັບ ຕ້ອງທຳກັນສອງຕໍ່ສອງນີ້ມີໂທສຫລາຍ ທ່ານເປັນຄົນທຳອິດທີ່ກໍ່ອກຸສົລທັມກ່ອນໃຜໝົດ ການກະທຳຢ່າງນີ້ບໍ່ໄດ້ເຮັດໃຫ້ ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ທີ່ຈິງແລ້ວ ມັນກັບຈະເຮັດໃຫ້ຄົນທີ່ບໍ່ເຫລື້ອມໃສກໍບໍ່ເຫລື້ອມໃສໄປເລີຍ ຄົນທີ່ເຫລື້ອມໃສຢູ່ແລ້ວບາງພວກກໍຈະກາຍເປັນອື່ນໄປ”

ຄັນພຣະຜູ້ມີພຣະພາຄຊົງຕຳໜິພຣະສຸທິນໂດຍປະການຕ່າງໆແລ້ວ ໄດ້ຕຣັສໂທສແຫ່ງຄວາມເປັນຄົນ ລ້ຽງຍາກ ບຳຣຸງຍາກ ມັກມາກ ບໍ່ສັນໂດສ ຄວາມເກືອກກົ້ວ ຄວາມກຽດຄ້ານ ຕຣັສຄຸນແຫ່ງຄວາມເປັນຄົນ ລ້ຽງງ່າຍ ບຳຣຸງງ່າຍ ມັກນ້ອຍ ສັນໂດສ ຄວາມຂັດເກົາ ຄວາມກຳຈັດກິເລສ ອາການໜ້າເຫລື້ອມໃສ ການບໍ່ສະສົມ ການປາຣົພຄວາມພຽນໂດຍປະການຕ່າງໆ ຊົງສະແດງທັມມີກຖາໃຫ້ເໝາະສົມ ໃຫ້ຄ້ອຍຕາມກັບເຣື້ອງນັ້ນ ແລ້ວຮັບສັ່ງກັບພິກສຸທັງຫລາຍວ່າ

"ພິກສຸທັງຫລາຍ ເພາະເຫຕຸນັ້ນ ເຮົາຈະບັນຍັຕສິກຂາບົທແກ່ພິກສຸທັງຫລາຍ ໂດຍອາສັຍອຳນາຈ ປໂຍດ ໑໐ ປະການ ຄື

໑. ເພື່ອຄວາມຮັບວ່າດີແຫ່ງສົງຂ໌
໔. ເພື່ອຄວາມຜາສຸກແຫ່ງສົງຂ໌
໓. ເພື່ອຂົ່ມບຸຄຄົລຜູ້ເກື້ອກູນຍາກ
໔. ເພື່ອຄວາມຢູ່ຜາສຸກແຫ່ງເຫລົ່າພິກສຸຜູ້ມີສີລດີງາມ
໕. ເພື່ອປິດກັ້ນອາສວະທັງຫລາຍອັນຈະບັງເກີດໃນປັຈຈຸບັນ
໖. ເພື່ອກຳຈັດອາສວະທັງຫລາຍອັນຈະບັງເກີດໃນອນາຄຕ
໗. ເພື່ອຄວາມເຫລື້ອມໃສຂອງຄົນທີ່ຍັງບໍ່ເຫລື້ອມໃສ
໘. ເພື່ອຄວາມເຫລື້ອມໃສຍິ່ງຂຶ້ນໄປຂອງຄົນທີ່ເຫລື້ອມໃສແລ້ວ
໙. ເພື່ອຄວາມຕັ້ງໝັ້ນແຫ່ງສັທທັມ
໑໐. ເພື່ອເອື້ອເຟື້ອວິນັຍ"

ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍ ຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

## ພຣະບັນຍັຕ

ກໍ ພິກສຸໃດເສພເມຖຸນທັມ ພິກສຸນັ້ນເປັນປາຣາຊິກ ຫາສັງວາສບໍ່ໄດ້ ສິກຂາບົທນີ້ ພຣະຜູ້ມີພຣະ ພາຄຊົງບັນຍັຕໄວ້ແກ່ພິກສຸທັງຫລາຍຢ່າງນີ້

ສຸທິນພານວາຣ ຈົບ

********** ສົມ ສັກ **********

## ເຣື່ອງລີງໂຕແມ່

[໔໐] ສມັຍນັ້ນ ພິກສຸຮູບນຶ່ງໃຫ້ອາຫາຣລ້ຽງລີງໂຕແມ່ໃນປ່າມຫາວັນ ກຸງເວສາລີ ແລ້ວເສພ ເມຖຸນ ທັມກັບນາງລີງນັ້ນ ຄັນເວລາເຊົ້າ ທ່ານຄອງອັນຕຣວາສກ ຖືບາຕຣແລະຈີວອນໄປ ບິນທບາຕໃນກຸງເວສາລີ ຕໍ່ມາພິກສຸຫລາຍຮູບຈາຣິກໄປຕາມເສນາສນະ ຍ່າງຜ່ານໄປທາງທີ່ຢູ່ຂອງ

ພິກສຸນັ້ນ ນາງລິງເຫັນພິກສຸເຫລົ່ານັ້ນກຳລັງຍ່າງມາແຕ່ໄກຈຶ່ງ ຍ່າງເຂົ້າໄປຫາແລ້ວສ່າຍແອວ ແກວ່ງຫາງ ໂກ່ງກົ້ນຂຶ້ນ ທຳທ່າທາງຕ່າງໆ ຕໍ່ຫນ້າພິກສຸເຫລົ່ານັ້ນ ພິກສຸເຫລົ່ານັ້ນ ຈຶ່ງພາກັນສັນນິຊຖານວ່າ ພິກສຸເຈົ້າຖິ່ນຄົງຈະເສພເມຖຸນທັມກັບນາງລິງຕົວນີ້ແນ່ນອນ ແລ້ວຈອບຢູ່ ນະ ທີ່ກຳບັງແຫ່ງນຶ່ງຈົນເມື່ອພິກສຸເຈົ້າຖິ່ນທ່ຽວບິນທບາຕໃນກຸງເວສາລີ ແລ້ວຖືອາຫາຣບິນ ທບາຕກັບມາ

[໔໑] ຂນະນັ້ນ ນາງລິງໄດ້ເຂົ້າໄປຫາພິກສຸເຈົ້າຖິ່ນນັ້ນ ຄັນພິກສຸເຈົ້າຖິ່ນສັນບິນທບາຕນັ້ນສ່ວນນຶ່ງແລ້ວ ໄດ້ແບ່ງອີກສ່ວນນຶ່ງໃຫ້ແກ່ນາງລິງ ເມື່ອມັນກິນອາຫາຣແລ້ວໄດ້ໂກ່ງກົ້ນໃຫ້ ພິກສຸເຈົ້າຖິ່ນຈຶ່ງເສພເມຖຸນທັມກັບມັນ ທັນໃດນັ້ນ ພິກສຸເຫລົ່ານັ້ນອອກຈາກທີ່ລີ້ຢູ່ ກ່າວກັບພິກສຸເຈົ້າຖິ່ນວ່າ "ທ່ານ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວບໍ່ແມ່ນບໍ ເຫຕຸໃດ ທ່ານຈຶ່ງເສພເມຖຸນທັມກັບນາງລິງນີ້ລະ" ທ່ານກ່າວແຍ້ງວ່າ "ແມ່ນແທ້ທ່ານທັງຫລາຍ ພຣະຜູ້ມີພຣະພາຄໄດ້ຊົງບັນຍັຕສິກຂາບົທໄວ້ແລ້ວ ແຕ່ສິກຂາບົທນັ້ນ ໃຊ້ສະເພາະກັບຍິງມນຸສ຺ຍ໌ ບໍ່ໃຊ້ໃນສັຕວ໌ເດັຽຣະສານ ໂຕແມ່" ພິກສຸເຫລົ່ານັ້ນກ່າວວ່າ "ພຣະບັນຍັຕນັ້ນໃຊ້ໄດ້ເຫມືອນກັນທັງໃນຍິງມນຸສ຺ຍ໌ແລະໃນສັຕວ໌ເດັຽຣະສານໂຕແມ່ບໍ່ແມ່ນບໍ ກາຣກະທຳຂອງທ່ານບໍ່ສົມຄວຣ ບໍ່ຄ້ອຍຕາມ ບໍ່ເຫມາະ ສົມ ບໍ່ແມ່ນກິຈຂອງສມນະ ໃຊ້ບໍ່ໄດ້ ບໍ່ຄວຣທຳເລີຍ ທ່ານບວຊໃນພຣະທັມວິນັຍທີ່ພຣະຜູ້ມີພຣະພາຄຕຣັສໄວ້ດີແລ້ວ ຈັ່ງໃດຈຶ່ງບໍ່ສາມາດປະພຶດພຣົມຈັນຍ໌ໃຫ້ບໍຣິສຸດທ໌ບໍຣິບູຣນ໌ໄດ້ຕລອດຊີວິຕລະ ພຣະຜູ້ມີພຣະພາຄ ຊົງສະແດງທັມໂດຍປະກາຣຕ່າງໆ ເພື່ອຄາຍຄວາມກຳຫນັດ ບໍ່ແມ່ນເພື່ອຄວາມກຳຫນັດ ຯລຯ ຕຣັສບອກກາຣຣະງັບຄວາມກັດກຸ້ມເພາະກາມໄວ້ໂດຍປະກາຣຕ່າງໆ ບໍ່ແມ່ນບໍ ກາຣເຮັດຢ່າງນີ້ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ທີ່ແມ່ນແທ້ກັບຈະເຮັດໃຫ້ຄົນທີ່ບໍ່ເຫລື້ອມໃສກໍບໍ່ເຫລື້ອມໃສໄປເລີຍ ຄົນທີ່ເຫລື້ອມໃສຢູ່ແລ້ວບາງພວກກໍຈະກາຍເປັນອື່ນໄປ" ຄັນພິກສຸເຫລົ່ານັ້ນຕຳຫນິພິກສຸນັ້ນໂດຍປະກາຣຕ່າງໆ ແລ້ວນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

## ຊົງປະຊຸມສົງຂ໌ບັນຍັຕອນຸບັນຍັຕ

[໔໒] ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເອື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພິກສຸນັ້ນວ່າ "ພິກສຸ ຊາບວ່າ ທ່ານເສພເມຖຸນທັມກັບນາງລິງ ແມ່ນແທ້ບໍ" ທ່ານ ທູລຮັບວ່າ "ແມ່ນແທ້ ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ໂມຂບຸຣຸສ ກາຣ

ກະທຳຂອງທ່ານບໍ່ສົມ ຄວຣ ບໍ່ຄ້ອຍຕາມ ບໍ່ເໝາະສົມ ບໍ່ແມ່ນກິຈຂອງສມນະ ໃຊ້ບໍ່ໄດ້ ບໍ່ຄວຣທຳ ທ່ານບວຊໃນທັມວິນັຍທີ່ເຮົາກ່າວດີແລ້ວ ຈັ່ງໃດຈຶ່ງບໍ່ສາມາດປະພຶດພຣົມຈັນຍ໌ໃຫ້ບໍຣິສຸດທ໌ບໍຣິບູຣນ໌ໄດ້ຕລອດຊີວິຕລະ ເຮົາສະແດງທັມໂດຍປະການຕ່າງໆ ເພື່ອຄາຍຄວາມກຳຫນັດ ຯລຯ ເຮົາບອກການຣະງັບຄວາມກັດກຸ້ມເພາະກາມໄວ້ໂດຍປະການຕ່າງໆ ບໍ່ແມ່ນບໍ?

ໂມຂບຸຣຸສ ທ່ານສອດອົງຄຊາຕເຂົ້າປາກອສໍຣພິສຮ້າຍເສັຽຍັງດີກວ່າສອດອົງຄຊາຕເຂົ້າອົງຄ໌ກຳເນີດນາງລິງ ສອດອົງຄຊາຕເຂົ້າປາກງູເຫົ່າເສັຽຍັງດີກວ່າສອດອົງຄຊາຕເຂົ້າອົງຄ໌ກຳເນີດນາງລິງ ສອດ ອົງຄຊາຕເຂົ້າຫລຸມຖ່ານໄຟເສັຽຍັງດີກວ່າສອດອົງຄຊາຕເຂົ້າອົງຄ໌ກຳເນີດນາງລິງ ເພາະຫຍັງລະ ເພາະຜູ້ສອດອົງຄ ຊາຕ ເຂົ້າປາກອສໍຣພິສຮ້າຍເປັນຕົ້ນ ອາດເຖິງຄວາມຕາຍຫລືທຸກຂ໌ປາງຕາຍ ເພາະການກະທຳນັ້ນເປັນເຫຕຸ ຫລັງຈາກຕາຍແລ້ວກໍບໍ່ຕ້ອງໄປບັງເກີດໃນອບາຍ ທຸຄຕິ ວິນິບາຕ ນຣົກ ສ່ວນຜູ້ສອດອົງຄຊາຕເຂົ້າອົງຄ໌ກຳເນີດນາງລິງ ຫລັງຈາກຕາຍແລ້ວຕ້ອງໄປບັງເກີດໃນອບາຍ ທຸຄຕິ ວິນິບາຕ ນຣົກ

ໂມຂບຸຣຸສ ໃນການທີ່ທ່ານເສພອສັທທັມຊຶ່ງເປັນປະເວນີຂອງຊາວບ້ານ ມາຣຍາທຂອງຄົນຊັ້ນຕ່ຳ ກິຣິ ຍາຊົ່ວຫຍາບ ມີນ້ຳເປັນທີ່ສຸດ ເປັນກິຈທີ່ຈະຕ້ອງກະທຳໃນທີ່ລັບ ຕ້ອງທຳກັນສອງຕໍ່ສອງນີ້ມີໂທສຫລາຍ

ໂມຂບຸຣຸສ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ທີ່ແມ່ນແທ້ກັບຈະເຮັດໃຫ້ຄົນທີ່ບໍ່ເຫລື້ອມໃສກໍບໍ່ເຫລື້ອມໃສໄປເລີຍ ຄົນທີ່ເຫລື້ອມໃສຢູ່ແລ້ວບາງພວກກໍຈະກາຍເປັນອື່ນໄປ” ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

## ພຣະອນຸບັນຍັຕ

ອີກຢ່າງນຶ່ງ ພິກສຸໃດເສພເມຖຸນທັມ ໂດຍທີ່ສຸດແມ່ນແຕ່ກັບສັຕວ໌ເດັຽຣະສານໂຕແມ່ ພິກສຸນັ້ນເປັນປາຣາຊິກ ຫາສັງວາສບໍ່ໄດ້

ສິກຂາບົທນີ້ ພຣະຜູ້ມີພຣະພາຄຊົງບັນຍັຕໄວ້ແກ່ພິກສຸທັງຫລາຍຢ່າງນີ້

## ເຣື້ອງລິງໂຕແມ່ ຈົບ

□□□□□□ ສົມ ສັກ □□□□□□

## ສັນຖຕພານວາຣ
## ເຣື້ອງພວກພິກສຸວັຊຊີບຸຕຣ

[໔໓] ສມັຍນັ້ນ ພວກພິກສຸວັຊຊີບຸຕຣຊາວກຸງເວສາລີຫລາຍຮູບສັນອາຫາຣ ຈຳວັດແລະສົງນ້ຳພໍແກ່ຄວາມຕ້ອງການ ມີຄວາມຕັ້ງໃຈໂດຍບໍ່ເຂົ້າທ່າ ບໍ່ບອກຄືນສິກຂາ ບໍ່ເປີດເຜີຍຄວາມທໍ້ແທ້ ພາກັນເສພເມຖຸນທັມ ຕໍ່ມາ ພວກທ່ານຖືກຄວາມເສື່ອມຍາຕ ຄວາມເສື່ອມໂພຄະແລະໂຣຄຫຸ້ມລ້ອມ ຈຶ່ງເຂົ້າໄປຫາທ່ານພຣະອານົນທ໌ ຮຽນວ່າ “ທ່ານພຣະອານົນທ໌ ພວກຜູ້ຂ້າບໍ່ຕິຕຽນພຣະພຸທທ ບໍ່ຕິຕຽນພຣະທັມ ບໍ່ຕິຕຽນພຣະສົງຂ໌ ພວກຜູ້ຂ້າຕິຕຽນຕົນເອງ ບໍ່ຕິຕຽນຜູ້ອື່ນ ພວກຜູ້ຂ້າບໍ່ມີວາສນາ ມີບຸນຫນ້ອຍ ບວຊໃນພຣະ ທັມວິນັຍທີ່ພຣະຜູ້ມີພຣະພາຄຕຣັສໄວ້ດີແລ້ວ ບໍ່ສາມາດຈະປະພຶດພຣົມຈັນຍ໌ໃຫ້ບໍຣິສຸດທ໌ບໍຣິບູຣນ໌ໄດ້ຕລອດຊີວິຕ ບັດນີ້ ຖ້າພວກຜູ້ຂ້າໄດ້ບັນພະຊາ ອຸປສົມບົທໃນສຳນັກພຣະຜູ້ມີພຣະພາຄອີກ ພວກຜູ້ຂ້າເພິ່ງເຫັນແຈ້ງກຸສົລທັມ ຫມັ່ນປະກອບຄວາມ ພຽນໃນການຈະເຣີນໂພທິປັກຂິຍທັມຕັ້ງແຕ່ຫົວຄ່ຳຈົນຮຸ່ງແຈ້ງ ພວກຜູ້ຂ້າຂໍໂອກາສ ທ່ານພຣະອານົນທ໌ ໄດ້ໂປດຂາບທູລເຣື້ອງນີ້ແດ່ພຣະຜູ້ມີພຣະພາຄເຖີດ” ພຣະອານົນທ໌ຮັບຄຳແລ້ວເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຄັນເຖິງແລ້ວໄດ້ຂາບທູລເຣື້ອງນີ້ໃຫ້ຊົງຊາບ ພຣະຜູ້ມີພຣະພາຄຕຣັສວ່າ “ອານົນທ໌ ບໍ່ແມ່ນຖານະ ບໍ່ແມ່ນໂອກາສທີ່ຕຖາຄົຕຈະຖອນປາຣາຊິກສິກ ຂາບົທ ທີ່ບັນຍັຕແກ່ສາວົກທັງຫລາຍ ເພາະພວກວັຊຊີຫລືວັຊຊີບຸຕຣເປັນເຫຕຸ” ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸແລ້ວ ຮັບສັ່ງກັບພິກສຸທັງຫລາຍວ່າ “ພິກສຸທັງຫລາຍ ຜູ້ໃດເປັນພິກສຸ ບໍ່ບອກຄືນສິກຂາ ບໍ່ເປີດເຜີຍຄວາມທໍ້ແທ້ເສພເມຖຸນທັມທັງທີ່ຍັງເປັນພິກສຸ ຜູ້ນັ້ນມາແລ້ວສົງຂ໌ບໍ່ເພິ່ງໃຫ້ອຸປສົມບົທ ແຕ່ຜູ້ໃດເປັນພິກສຸ ບອກຄືນສິກຂາ ເປີດເຜີຍຄວາມທໍ້ແທ້ແລ້ວເສພເມຖຸນທັມ ຜູ້ນັ້ນມາແລ້ວ ສົງຂ໌ເພິ່ງໃຫ້ອຸປສົມບົທ” ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

## ພຣະອນຸບັນຍັຕ

[໔໔] ອີກຢ່າງນຶ່ງ ພິກສຸໃດເຖິງພ້ອມດ້ວຍສິກຂາແລະສາຊີພຂອງພິກສຸທັງຫລາຍ ບໍ່ບອກຄືນສິກຂາ ບໍ່ເປີດເຜີຍຄວາມທໍ້ແທ້ເສພເມຖຸນທັມໂດຍທີ່ສຸດ ແມ່ນແຕ່ກັບສັຕວ໌ເດັຽຣະສານໂຕແມ່ ພິກສຸນັ້ນເປັນປາຣາຊິກ ຫາສັງວາສບໍ່ໄດ້

## ເຣື້ອງພວກພິກສຸວັຊຊີບຸຕຣ ຈົບ

□□□□□□ ສົມ
ສັກ □□□□□□

## ພຣະວິນັຍປິດົກ ມຫາວິພັງຄ໌ [໑. ປາຣາຊິກກັນຫ໌] ປາຣາຊິກສິກຂາບົທທີ ໑ ສິກຂາບົທວິພັງຄ໌ ສິກຂາບົທວິພັງຄ໌

[໔໕] ຄຳວ່າ ອີກຢ່າງນຶ່ງ...ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ມີກາຣງານ ມີຊາຕິວັນນະ ມີຊື່ ມີຕະກູນ ມີລັກສນນິສັຍ ມີຄຸນທັມມີອາຣົມນ໌ຢ່າງໃດ ເປັນເຖຣະ ນວກະຫລືມັຊຊິມະນີ້ ທີ່ພຣະຜູ້ມີພຣະພາຄຕຣັສວ່າ ອີກຢ່າງນຶ່ງ...ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າ ພິກສຸ ເພາະເປັນຜູ້ຂໍ ຊື່ວ່າ ພິກສຸ ເພາະອາສັຍກາຣທຽວຂໍ ຊື່ວ່າ ພິກສຸ ເພາະໃຊ້ຜືນຜ້າທີ່ຖືກເຮັດໃຫ້ເສັ້ງຣາຄາ ຊື່ວ່າ ພິກສຸ ເພາະຮຽກກັນໂດຍໂວຫາຣ ຊື່ວ່າ ພິກສຸ ເພາະກາຣປະຕິຍານຕົນ ຊື່ວ່າພິກສຸ ເພາະພຣະພຸທທເຈົ້າຊົງບວຊໃຫ້ ຊື່ວ່າພິກສຸ ເພາະເປັນຜູ້ອຸປສົມບົທດ້ວຍໄຕຣສຣນຄົມນ໌ ຊື່ວ່າພິກສຸ ເພາະເປັນຜູ້ຈະເຣີນ ຊື່ວ່າພິກສຸ ເພາະເປັນຜູ້ມີສາຣະ ຊື່ວ່າພິກສຸ ເພາະເປັນຜູ້ຍັງຕ້ອງສຶກສາ ຊື່ວ່າພິກສຸ ເພາະເປັນຜູ້ບໍ່ຕ້ອງສຶກສາ ຊື່ວ່າພິກສຸ ເພາະເປັນຜູ້ທີ່ສົງຂ໌ ພ້ອມພຽງກັນອຸປສົມບົທໃຫ້ ດ້ວຍຍັຕຕິຈຕຸຕຖກັມທີ່ຖືກຕ້ອງ ສົມຄວຣແກ່ເຫຕຸ ໃນພິກສຸທີ່ກ່າວມານັ້ນ ພິກສຸ ຜູ້ທີ່ສົງຂ໌ພ້ອມພຽງກັນ ອຸປສົມບົທໃຫ້ດ້ວຍຍັຕຕິຈຕຸຕຖກັມທີ່ຖືກຕ້ອງສົມຄວຣແກ່ເຫຕຸນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ຄຳວ່າ ສິກຂາ ໄດ້ແກ່ ສິກຂາ ໓ ຢ່າງ ຄື ອທິສີລສິກຂາ ອທິຈິຕຕສິກຂາ ແລະອທິປັຍຍາສິກຂາ ໃນສິກຂາ ໓ ນັ້ນ ອທິສີລສິກຂານີ້ທີ່ຊົງປະສົງຄ໌ເອົາໃນຄວາມຫມາຍນີ້ທີ່ຊື່ວ່າ ສາຊີພ ຫມາຍເຖິງ ສິກຂາບົທທີ່ພຣະຜູ້ມີພຣະພາຄຊົງບັນຍັຕໄວ້ ພິກສຸສຶກສາສາຊີພນັ້ນ ເຫຕຸນັ້ນ ພຣະຜູ້ມີພຣະພາຄຈຶ່ງຕຣັສວ່າ ຜູ້ເຖິງພ້ອມດ້ວຍສາຊີພ

ຄຳວ່າ ບໍ່ບອກຄືນສິກຂາ ບໍ່ເປີດເຜີຍຄວາມທໍ້ແທ້ມີພຸທທາທິບາຍວ່າ ພິກສຸທັງຫລາຍ ກາຣເປີດເຜີຍຄວາມທໍ້ແທ້ແຕ່ບໍ່ເປັນກາຣບອກຄືນສິກຂາກໍມີ ກາຣເປີດເຜີຍຄວາມທໍ້ແທ້ແລະເປັນກາຣບອກຄືນສິກຂາກໍມີ

■■■■■■■■■■■■■■■■■■■■

## ພຣະວິນັຍປິດົກ ມຫາວິພັງຄ໌ [໑. ປາຣາຊິກກັນຫ໌] ປາຣາຊິກສິກຂາບົທທີ ໑
## ບົທພາຊນີຍ໌ ສັນຖຕພານວາຣ

### ບົທພາຊນີຍ໌
### ລັກສູນະທີ່ບໍ່ເປັນອັນບອກຄືນສິກຂາ

ພິກສຸທັງຫລາຍ ຢ່າງໃດ ຊື່ວ່າການເປີດເຜີຍຄວາມທໍ້ແທ້ ແຕ່ບໍ່ເປັນການບອກຄືນສິກຂາ

### ໑. ການບອກຄືນສິກຂາດ້ວຍການໃຊ້ຄຳຮຳເພິງ ໑໔ ບົທ

(໑) ພິກສຸທັງຫລາຍ ພິກສຸໃນທັມວິນັຍນີ້ ກະສັນ ບໍ່ຍິນດີ ປຣາຖນາຈະສິກ ອຶດອັດ ເບື່ອຫນ່າຍ ກຽດຊັງເພສພິກສຸ ປຣາຖນາຈະເປັນຄຣືຫັສຖ໌ ປຣາຖນາຈະເປັນອຸບາສົກ ປຣາຖນາຈະເປັນຄົນວັດ ປຣາຖນາຈະເປັນສາມເນຣ ປຣາຖນາຈະເປັນເດັຽຣະຖີຍ໌ ປຣາຖນາຈະເປັນສາວົກເດັຽຣະຖີຍ໌ ປຣາຖນາຈະບໍ່ເປັນສມນະ ປຣາຖນາຈະບໍ່ເປັນເຊື້ອສາຍພຣະສູາກຍບຸຕຣ ບອກໃຫ້ຜູ້ອື່ນຮູ້ວ່າ "ຈັ່ງໃດນໍ ຂ້າພະເຈົ້າເພິງບອກຄືນພຣະພຸທທເຈົ້າ" ພິກສຸທັງຫລາຍ ແມ່ນຢ່າງນີ້ ທີ່ຊື່ວ່າເປັນການເປີດເຜີຍຄວາມທໍ້ແທ້ແຕ່ບໍ່ເປັນການບອກຄືນສິກຂາ

(໒) ອີກປະການນຶ່ງ ພິກສຸໃນທັມວິນັຍ ກະສັນ ບໍ່ຍິນດີ ປຣາຖນາຈະສິກ ອຶດອັດ ເບື່ອຫນ່າຍ ກຽດຊັງເພສພິກສຸ ປຣາຖນາຈະເປັນຄຣືຫັສຖ໌ ຯລຯ ປຣາຖນາຈະບໍ່ເປັນເຊື້ອສາຍພຣະສູາກຍບຸຕຣ ບອກໃຫ້ຜູ້ອື່ນຮູ້ວ່າ ຈັ່ງໃດນໍ ຂ້າພະເຈົ້າເພິງບອກຄືນພຣະທັມ (໓) ...ບອກໃຫ້ຜູ້ອື່ນຮູ້ວ່າ ຈັ່ງໃດນໍ ຂ້າພະເຈົ້າເພິງບອກຄືນພຣະສົງຂ໌ (໔) ...ບອກໃຫ້ຜູ້ອື່ນຮູ້ວ່າ ຈັ່ງໃດນໍ ຂ້າພະເຈົ້າເພິງບອກຄືນສິກຂາ (໕) ...ບອກໃຫ້ຜູ້ອື່ນຮູ້ວ່າ ຈັ່ງໃດນໍ ຂ້າພະເຈົ້າເພິງບອກຄືນພຣະວິນັຍ (໖) ...ບອກໃຫ້ຜູ້ອື່ນຮູ້ວ່າ ຈັ່ງໃດນໍ ຂ້າພະເຈົ້າເພິງບອກຄືນພຣະປາຕິໂມກຂ໌ (໗) ...ບອກໃຫ້ຜູ້ອື່ນຮູ້ວ່າ ຈັ່ງໃດນໍ ຂ້າພະເຈົ້າເພິງບອກຄືນອຸທເທສ (໘) ...ບອກໃຫ້ຜູ້ອື່ນຮູ້ວ່າ ຈັ່ງໃດນໍ ຂ້າພະເຈົ້າເພິງບອກຄືນພຣະອຸປັຊຍາຍ໌ (໙) ...ບອກໃຫ້ຜູ້ອື່ນຮູ້ວ່າ ຈັ່ງໃດນໍ ຂ້າພະເຈົ້າເພິງບອກຄືນພຣະອາຈາຣຍ໌ (໑໐) ...ບອກໃຫ້ຜູ້ອື່ນຮູ້ວ່າ ຈັ່ງໃດນໍ ຂ້າພະເຈົ້າເພິງບອກຄືນສັທທິວິຫາຣິກ (໑໑) ...ບອກໃຫ້ຜູ້ອື່ນຮູ້ວ່າ ຈັ່ງໃດນໍ ຂ້າພະເຈົ້າເພິງບອກຄືນອັນເຕວາສິກ (໑໒) ...ບອກໃຫ້ຜູ້ອື່ນຮູ້ວ່າ ຈັ່ງໃດນໍ ຂ້າພະເຈົ້າ

ເພິງບອກຄືນພິກສຸຜູ້ຮ່ວມອຸປັຊຊາຍ໌ (໑໓) ...ບອກໃຫ້ຜູ້ອື່ນຮູ້ວ່າ ຈົ່ງໃດນໍ ຂ້າພະເຈົ້າເພິງບອກຄືນພິກສຸຜູ້ຮ່ວມອາຈາຣຍ໌ (໑໔) ...ບອກໃຫ້ຜູ້ອື່ນຮູ້ວ່າ ຈົ່ງໃດນໍ ຂ້າພະເຈົ້າເພິງບອກຄືນເພື່ອນພຣົມຈາຣີ

ພິກສຸທັງຫລາຍ ແມ່ນຢ່າງນີ້ ກໍຊື່ວ່າ ເປັນການເປີດເຜີຍຄວາມທໍ້ແທ້ ແຕ່ບໍ່ເປັນການບອກຄືນສິກຂາ

## ໔. ການບອກຄືນສິກຂາດ້ວຍການໃຊ້ຄຳຮຳເພິງກຳຫນົດພາວະ ໗ ບົທ

(໑) ພິກສຸໃນທັມວິນັຍນີ້ ກະສັນ ບໍ່ຍິນດີ ປຣາຖນາຈະສິກ ອຶດອັດ ເບື່ອຫນ່າຍ ກຽດຊັງເພສພິກສຸ ປຣາຖນາ ຈະເປັນຄຣືຫັສຖ໌ ຯລຯ ປຣາຖນາຈະບໍ່ເປັນເຊື້ອສາຍພຣະສກາຍບຸຕຣ ບອກໃຫ້ຜູ້ອື່ນຮູ້ວ່າ ຈົ່ງໃດນໍ ຂ້າພະເຈົ້າເພິງເປັນຄຣືຫັສຖ໌ (໒) ...ເພິງເປັນອຸບາສົກ (໓) ...ເພິງເປັນຄົນວັດ (໔) ...ເພິງເປັນສາມເນຣ (໕) ...ເພິງເປັນເດັຽຣະຖີຍ໌ (໖) ...ເພິງເປັນສາວົກເດັຽຣະຖີຍ໌ (໗) ...ເພິງເປັນຜູ້ບໍ່ແມ່ນສມນະ (໘) ...ເພິງເປັນຜູ້ບໍ່ແມ່ນເຊື້ອສາຍພຣະສກາຍບຸຕຣ

ພິກສຸທັງຫລາຍ ແມ່ນຢ່າງນີ້ກໍຊື່ວ່າເປັນການເປີດເຜີຍຄວາມທໍ້ແທ້ ແຕ່ບໍ່ເປັນການບອກຄືນສິກຂາ

## ໕.-໑໐. ການບອກຄືນສິກຂາດ້ວຍການໃຊ້ຄຳປຣິກັປ ໑໔ ບົທແລະ ໘ ບົທ

[໔໖] (໑) ອີກປະການນຶ່ງ ພິກສຸໃນທັມວິນັຍນີ້ ກະສັນ ບໍ່ຍິນດີ ປຣາຖນາຈະສິກ ອຶດອັດ ເບື່ອຫນ່າຍ ກຽດຊັງເພສພິກສຸ ປຣາຖນາຈະເປັນຄຣືຫັສຖ໌ ຯລຯ ປຣາຖນາຈະບໍ່ເປັນເຊື້ອສາຍພຣະສກາຍບຸຕຣ ບອກໃຫ້ຜູ້ອື່ນຮູ້ວ່າ ກໍຖ້າວ່າ ຂ້າພະເຈົ້າເພິງບອກຄືນພຣະພຸທທເຈົ້າ... (໘) ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ກໍຖ້າວ່າ ຂ້າພະເຈົ້າເພິງເປັນຜູ້ບໍ່ແມ່ນເຊື້ອສາຍພຣະສກາຍບຸຕຣ... (໑) ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ກໍຖ້າວ່າ ຂ້າພະເຈົ້າເພິງບອກຄືນພຣະພຸທທເຈົ້າ... (໘) ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ກໍຖ້າວ່າ ຂ້າພະເຈົ້າເພິງເປັນຜູ້ບໍ່ແມ່ນເຊື້ອສາຍພຣະສກາຍບຸຕຣ...(໑) ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ເອົາເຖາະ ຂ້າພະເຈົ້າເພິງບອກຄືນພຣະພຸທທເຈົ້າ... (໘) ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ເອົາເຖາະເຖາະ ຂ້າພະເຈົ້າເພິງເປັນຜູ້ບໍ່ແມ່ນເຊື້ອສາຍພຣະສກາຍບຸຕຣ... (໑) ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າມີຄວາມດຳຣິວ່າ ຂ້າພະເຈົ້າເພິງບອກຄືນພຣະພຸທທເຈົ້າ... (໘) ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າມີຄວາມດຳຣິວ່າ ຂ້າພະເຈົ້າເພິງເປັນຜູ້ບໍ່ແມ່ນເຊື້ອສາຍພຣະສກາຍບຸຕຣ

ພິກສຸທັງຫລາຍ ແມ່ນຢ່າງນີ້ ກໍຊື່ວ່າເປັນການເປີດເຜີຍຄວາມທໍ້ແທ້ ແຕ່ບໍ່ເປັນການບອກຄືນສິກຂາ

## ໑໑. ການບອກຄືນສິກຂາດ້ວຍການໃຊ້ຄໍາອ້າງວັຕຖຸທີ່ຣະນຶກ ໑໗ ບົທ

[໔໗] (໑) ອີກປະການນຶ່ງ ພິກສຸກະສັນ ບໍ່ຍິນດີ ປຣາຖນາຈະສຶກ ອຶດອັດ ເບື່ອຫນ່າຍ ກຽດຊັງເພສພິກສຸ ປຣາຖນາຈະເປັນຄຣືຫັສຖ໌ ຯລຯ ປຣາຖນາຈະບໍ່ເປັນເຊື້ອສາຍພຣະສກຍບຸຕຣ ບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າຣະນຶກເຖິງມາຣດາ (໒) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າຣະນຶກເຖິງບິດາ (໓) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າຣະນຶກເຖິງອ້າຍ ນ້ອງຊາຍ (໔) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າຣະນຶກເຖິງເອື້ອຍ ນ້ອງສາວ (໕) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າຣະນຶກເຖິງບຸຕຣ (໖) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າຣະນຶກເຖິງທິດາ (໗) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າຣະນຶກເຖິງພັຣຍາ (໘) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າຣະນຶກເຖິງຫມູ່ຍາຕ (໙) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າຣະນຶກເຖິງຫມູ່ມິຕຣ (໑໐) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າຣະນຶກເຖິງບ້ານ (໑໑) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າຣະນຶກເຖິງນິຄົມ (໑໒) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າຣະນຶກເຖິງນາ (໑໓) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າຣະນຶກເຖິງສວນ (໑໔) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າຣະນຶກເຖິງເງິນ (໑໕) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າຣະນຶກເຖິງຄໍາ (໑໖) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າຣະນຶກເຖິງສິລປະ (໑໗) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າຣະນຶກເຖິງການຫົວຍິ້ມ ການເຈຣຈາ ການຫລິ້ນໃນຄັ້ງກ່ອນ

ພິກສຸທັງຫລາຍ ແມ່ນຢ່າງນີ້ ກໍຊື່ວ່າເປັນການເປີດເຜີຍຄວາມທໍ້ແທ້ ແຕ່ບໍ່ເປັນການບອກຄືນສິກຂາ

## ໑໒. ການບອກຄືນສິກຂາດ້ວຍການໃຊ້ຄໍາສະແດງຄວາມຫ່ວງໃຍ ໙ ບົທ

[໔໘] (໑) ອີກປະການນຶ່ງ ພິກສຸກະສັນ ບໍ່ຍິນດີ ປຣາຖນາຈະສຶກ ອຶດອັດ ເບື່ອຫນ່າຍ ກຽດຊັງເພສພິກສຸ ປຣາຖນາຈະເປັນຄຣືຫັສຖ໌ ຯລຯ ປຣາຖນາຈະບໍ່ເປັນເຊື້ອສາຍພຣະສກຍບຸຕຣ ບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າມີມາຣດາທີ່ຕ້ອງລ້ຽງດູ (໒) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າມີບິດາທີ່ຕ້ອງລ້ຽງດູ (໓) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າມີອ້າຍ ນ້ອງຊາຍທີ່ຕ້ອງລ້ຽງດູ (໔) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າມີເອື້ອຍນ້ອງ ສາວທີ່ຕ້ອງລ້ຽງດູ (໕) ...ພິກສຸບອກໃຫ້ຜູ້ອື່ນຮູ້

ວ່າ ຂ້າພະເຈົ້າມີບຸຕຣທີ່ຕ້ອງລ້ຽງດູ (໖) ...ພິກສຸບອກໃຫ້ຜູ້ ອື່ນ ຮູ້ວ່າຂ້າພະເຈົ້າມີທິດາທີ່ຕ້ອງລ້ຽງດູ (໗) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າມີພັຣຍາທີ່ຕ້ອງລ້ຽງດູ
(໘) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າມີຫມູ່ຍາຕທີ່ຕ້ອງລ້ຽງດູ (໙) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະ ເຈົ້າ ມີຫມູ່ມິຕຣທີ່ຕ້ອງລ້ຽງດູ

ພິກສຸທັງຫລາຍ ແມ່ນຢ່າງນີ້ ກໍຊື່ວ່າເປັນການເປີດເຜີຍຄວາມທໍ້ແທ້ ແຕ່ບໍ່ເປັນການບອກຄືນສິກຂາ

## ໑໓. ການບອກຄືນສິກຂາດ້ວຍການໃຊ້ຄໍາອ້າງທີ່ຢູ່ອາສັຍ ໑໖ ບົທ

[໔໙] (໑) ອີກປະການນຶ່ງ ພິກສຸກະສັນ ບໍ່ຍິນດີ ປຣາຖນາຈະສິກ ອຶດອັດ ເບື່ອຫນ່າຍ ກຽດຊັງເພສພິກສຸ ປຣາຖນາຈະເປັນຄຣືຫັສຖ໌ ຯລຯ ປຣາຖນາຈະບໍ່ເປັນເຊື້ອສາຍພຣະສາກຍບຸຕຣ ບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າມີມາຣດາ ທ່ານຈັກລ້ຽງດູຂ້າພະເຈົ້າ (໒) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າມີບິດາ ທ່ານຈັກລ້ຽງດູຂ້າພະ ເຈົ້າ (໓) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າມີອ້າຍນ້ອງຊາຍ ເຂົາຈັກລ້ຽງດູຂ້າພະເຈົ້າ (໔) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າມີເອື້ອຍ ນ້ອງສາວເຂົາຈັກລ້ຽງດູຂ້າພະເຈົ້າ (໕) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະ ເຈົ້າມີບຸຕຣ ເຂົາຈັກລ້ຽງດູຂ້າພະເຈົ້າ (໖) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າມີທິດາ ເຂົາຈັກລ້ຽງດູຂ້າພະ ເຈົ້າ (໗) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າມີພັຣຍາ ນາງຈັກລ້ຽງດູຂ້າພະເຈົ້າ (໘) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າມີຫມູ່ຍາຕ ພວກເຂົາຈັກລ້ຽງດູຂ້າພະເຈົ້າ (໙) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າມີຫມູ່ມິຕຣ ພວກເຂົາຈັກລ້ຽງດູຂ້າພະເຈົ້າ (໑໐) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າມີບ້ານ ຂ້າພະເຈົ້າຈັກລ້ຽງຊີພດ້ວຍບ້ານນັ້ນ (໑໑) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າມີນິຄົມ ຂ້າພະເຈົ້າຈັກລ້ຽງຊີພດ້ວຍນິຄົມນັ້ນ (໑໒) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າມີນາ ຂ້າພະເຈົ້າຈັກລ້ຽງຊີພດ້ວຍນານັ້ນ (໑໓) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າມີສວນ ຂ້າພະເຈົ້າຈັກລ້ຽງຊີພດ້ວຍສວນນັ້ນ (໑໔) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະ ເຈົ້າມີເງິນ ຂ້າພະເຈົ້າຈັກລ້ຽງຊີພດ້ວຍເງິນນັ້ນ (໑໕) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າມີຄໍາ ຂ້າພະເຈົ້າຈັກລ້ຽງຊີພດ້ວຍຄໍານັ້ນ (໑໖) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າມີສິລປະ ຂ້າພະເຈົ້າຈັກລ້ຽງຊີພດ້ວຍສິລປະນັ້ນ

ພິກສຸທັງຫລາຍ ແມ່ນຢ່າງນີ້ ກໍຊື່ວ່າເປັນການເປີດເຜີຍຄວາມທໍ້ແທ້ ແຕ່ບໍ່ເປັນການບອກຄືນສິກຂາ

### ໑໔. ການບອກຄືນສິກຂາດ້ວຍການອ້າງວ່າພຣົມຈັນຍ໌ເຮັດໄດ້ຍາກ ໆ ບົທ

[໕໐] (໑) ອີກປະການນຶ່ງ ພິກສຸກະສັນ ບໍ່ຍິນດີ ປຣາຖນາຈະສິກ ອຶດອັດ ເບື່ອຫນ່າຍ ກຽດຊັງ ເພສພິກສຸ ປຣາຖນາຈະເປັນຄຣືຫັສຖ໌ ຯລຯ ປຣາຖນາຈະບໍ່ເປັນເຊື້ອສາຍພຣະສາກຍບຸຕຣ ບອກໃຫ້ຜູ້ອື່ນຮູ້ວ່າ ພຣົມຈັນຍ໌ເຮັດໄດ້ຍາກ (໒) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ພຣົມຈັນຍ໌ກະທຳບໍ່ໄດ້ງ່າຍ (໓) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ພຣົມຈັນຍ໌ປະພຶດໄດ້ຍາກ (໔) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ພຣົມຈັນຍ໌ປະພຶດບໍ່ໄດ້ງ່າຍ (໕) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ເຮົາບໍ່ອາຈ (໖) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ເຮົາບໍ່ສາມາດ (໗) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ເຮົາບໍ່ຍິນດີ (໘) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ເຮົາບໍ່ມ່ວນຊື່ນ

ພິກສຸທັງຫລາຍ ແມ່ນຢ່າງນີ້ ກໍຊື່ວ່າເປັນການເປີດເຜີຍຄວາມທໍ້ແທ້ ແຕ່ບໍ່ເປັນການບອກຄືນສິກຂາ

### ລັກສນະທີ່ຈັດວ່າເປັນການບອກຄືນສິກຂາ

[໕໑] ພິກສຸທັງຫລາຍ ອັນໃດ ຊື່ວ່າການເປີດເຜີຍຄວາມທໍ້ແທ້ແລະເປັນການບອກຄືນສິກຂາ

### ໑. ການບອກຄືນສິກຂາດ້ວຍຄຳເປັນປັຈຈຸບັນ ໑໔ ບົທ

(໑) ພິກສຸທັງຫລາຍ ພິກສຸໃນທັມວິນັຍນີ້ ກະສັນ ບໍ່ຍິນດີ ປຣາຖນາຈະສິກ ອຶດອັດ ເບື່ອຫນ່າຍ ກຽດຊັງເພສພິກສຸ ປຣາຖນາຈະເປັນຄຣືຫັສຖ໌ ຯລຯ ປຣາຖນາຈະບໍ່ເປັນເຊື້ອສາຍພຣະສາກຍບຸຕຣ ບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າບອກຄືນພຣະພຸທທເຈົ້າ

ພິກສຸທັງຫລາຍ ແມ່ນຢ່າງນີ້ ກໍຊື່ວ່າເປັນການເປີດເຜີຍຄວາມທໍ້ແທ້ ແລະເປັນການບອກຄືນສິກຂາ

(໒) ອີກປະການນຶ່ງ ພິກສຸກະສັນ ບໍ່ຍິນດີ ປຣາຖນາຈະສິກ ອຶດອັດ ເບື່ອຫນ່າຍ ກຽດຊັງເພສພິກສຸ ປຣາຖນາຈະເປັນຄຣືຫັສຖ໌ ຯລຯ ປຣາຖນາຈະບໍ່ເປັນເຊື້ອສາຍພຣະສາກຍບຸຕຣ ບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າບອກຄືນພຣະທັມ (໓) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າບອກຄືນພຣະສົງຂ໌ (໔) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າບອກຄືນສິກຂາ (໕) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າບອກຄືນພຣະວິນັຍ (໖) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າບອກຄືນພຣະປາຕິໂມກຂ໌ (໗) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າບອກຄືນອຸທເທສ (໘) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າ

ບອກຄືນພຣະອຸປັຊຊາຍ໌ (໙) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າບອກຄືນພຣະອາຈາຣຍ໌ (໑໐) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າບອກຄືນສັທຫິວິຫາຣິກ (໑໑) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າບອກຄືນອັນເຕວາສິກ (໑໒) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າບອກຄືນພິກສຸຜູ້ຮ່ວມອຸປັຊຊາຍ໌ (໑໓) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າບອກຄືນພິກສຸຜູ້ຮ່ວມອາຈາຣຍ໌ (໑໔) ... ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າບອກຄືນເພື່ອນພຣົມຈາຣີ

ພິກສຸທັງຫລາຍ ແມ່ນຢ່າງນີ້ ກໍຊື່ວ່າເປັນການເປີດເຜີຍຄວາມທໍ້ແທ້ ແລະເປັນການບອກຄືນສິກຂາ

## ໒. ການບອກຄືນສິກຂາໂດຍການສະແດງພາວະ ໘ ບົທ

(໑) ອີກປະການນຶ່ງ ພິກສຸກະສັນ ບໍ່ຍິນດີ ປຣາຖນາຈະສິກ ອຶດອັດ ເບື່ອຫນ່າຍ ກຽດຊັງເພສພິກສຸ ປຣາຖນາຈະເປັນຄຣືຫັສຖ໌ ຯລຯ ປຣາຖນາຈະບໍ່ເປັນເຊື້ອສາຍພຣະສາກຍບຸຕຣ ບອກໃຫ້ຜູ້ອື່ນຮູ້ວ່າ ທ່ານຈົ່ງຈຳຂ້າພະ ເຈົ້າວ່າເປັນຄຣືຫັສຖ໌ (໒) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ທ່ານຈົ່ງຈຳຂ້າພະເຈົ້າວ່າເປັນອຸບາສິກ (໓) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ທ່ານຈົ່ງຈຳຂ້າພະເຈົ້າວ່າເປັນຄົນວັດ (໔) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ທ່ານຈົ່ງຈຳຂ້າພະ ເຈົ້າວ່າເປັນສາມເນຣ (໕) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ທ່ານຈົ່ງຈຳຂ້າພະເຈົ້າວ່າເປັນເດັຽຣະຖີຍ໌ (໖) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ທ່ານຈົ່ງຈຳຂ້າພະເຈົ້າວ່າເປັນສາວົກເດັຽຣະຖີຍ໌ (໗) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ທ່ານຈົ່ງຈຳຂ້າພະເຈົ້າວ່າເປັນຜູ້ບໍ່ແມ່ນສມນະ (໘) ...ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ທ່ານຈົ່ງຈຳຂ້າພະເຈົ້າວ່າເປັນຜູ້ບໍ່ແມ່ນເຊື້ອສາຍພຣະສາກຍບຸຕຣ

ພິກສຸທັງຫລາຍ ແມ່ນຢ່າງນີ້ ກໍຊື່ວ່າເປັນການເປີດເຜີຍຄວາມທໍ້ແທ້ ແລະເປັນການບອກຄືນສິກຂາ

## ໓. ການບອກຄືນສິກຂາໂດຍໃຊ້ຄຳເປັນປັຈຈຸບັນວ່າບໍ່ກ່ຽວຂ້ອງ ໑໔ ບົທ

[໕໒] (໑) ອີກປະການນຶ່ງ ພິກສຸກະສັນ ບໍ່ຍິນດີ ປຣາຖນາຈະສິກ ອຶດອັດ ເບື່ອຫນ່າຍ ກຽດຊັງເພສພິກສຸ ປຣາຖນາຈະເປັນຄຣືຫັສຖ໌ ຯລຯ ປຣາຖນາຈະບໍ່ເປັນເຊື້ອສາຍພຣະສາກຍບຸຕຣ ບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າເລີກກ່ຽວຂ້ອງກັບພຣະພຸທທເຈົ້າ ຯລຯ

(໑໔) ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າເລີກກ່ຽວຂ້ອງກັບເພື່ອນພຣົມຈາຣີ

ພິກສຸທັງຫລາຍ ແມ່ນຢ່າງນີ້ ກໍຊື່ວ່າເປັນການເປີດເຜີຍຄວາມທໍ້ແທ້ ແລະເປັນການບອກຄືນສິກຂາ

## ໔. ການບອກຄືນສິກຂາໂດຍໃຊ້ຄໍາວ່າຈະມີຫຍັງ ໑໔ ບົທ

(໑) ອີກປະການນຶ່ງ ພິກສຸໃນທັມວິນັຍນີ້ ບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າຊິມີຫຍັງກັບພຣະພຸທທເຈົ້າ ຯລຯ (໑໔) ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າຊິມີຫຍັງກັບເພື່ອນພຣົມຈາຣີ

ພິກສຸທັງຫລາຍ ແມ່ນຢ່າງນີ້ ກໍຊື່ວ່າເປັນການເປີດເຜີຍຄວາມທໍ້ແທ້ ແລະເປັນການບອກຄືນສິກຂາ

## ໕. ການບອກຄືນສິກຂາໂດຍໃຊ້ຄໍາວ່າບໍ່ຕ້ອງການ ໑໔ ບົທ

(໑) ອີກປະການນຶ່ງ ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າບໍ່ຕ້ອງການພຣະພຸທທເຈົ້າ ຯລຯ (໑໔) ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າບໍ່ຕ້ອງການເພື່ອນພຣົມຈາຣີ

ພິກສຸທັງຫລາຍ ແມ່ນຢ່າງນີ້ ກໍຊື່ວ່າເປັນການເປີດເຜີຍຄວາມທໍ້ແທ້ ແລະເປັນການບອກຄືນສິກຂາ

## ໖. ການບອກຄືນສິກຂາໂດຍໃຊ້ຄໍາວ່າພົ້ນຂາດແລ້ວ ໑໔ ບົທ

(໑) ອີກປະການນຶ່ງ ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າພົ້ນຂາດແລ້ວຈາກພຣະພຸທທເຈົ້າ ຯລຯ (໑໔) ພິກສຸບອກໃຫ້ຜູ້ອື່ນຮູ້ວ່າ ຂ້າພະເຈົ້າພົ້ນຂາດແລ້ວຈາກເພື່ອນພຣົມຈາຣີ

ພິກສຸທັງຫລາຍ ແມ່ນຢ່າງນີ້ ກໍຊື່ວ່າເປັນການເປີດເຜີຍຄວາມທໍ້ແທ້ ແລະເປັນການບອກຄືນສິກຂາ

## ບອກຄືນສິກຂາໂດຍການໃຊ້ຄໍາໄວພົຈນ໌

[໕໓] ອີກປະການນຶ່ງ ຄໍາທີ່ເປັນໄວພົຈນ໌ ຂອງພຣະພຸທທ ຄໍາທີ່ເປັນໄວພົຈນ໌ຂອງພຣະທັມ ຄໍາທີ່ເປັນໄວພົຈນ໌ ຂອງພຣະສົງຂ໌ ຄໍາທີ່ເປັນໄວພົຈນ໌ຂອງສິກຂາ ຄໍາທີ່ເປັນໄວພົຈນ໌ຂອງພຣະວິນັຍ ຄໍາທີ່ເປັນໄວພົຈນ໌ຂອງພຣະປາຕິໂມກຂ໌ ຄໍາທີ່ເປັນໄວພົຈນ໌ຂອງອຸທເທສ ຄໍາທີ່ເປັນໄວພົຈນ໌ຂອງພຣະອຸປັຊຍາຍ໌ ຄໍາທີ່ເປັນໄວພົຈນ໌ຂອງພຣະອາຈາຣຍ໌ ຄໍາທີ່ເປັນໄວພົຈນ໌ຂອງສັທທິວິຫາຣິກ ຄໍາທີ່ເປັນໄວພົຈນ໌ຂອງອັນເຕວາສິກ ຄໍາທີ່ເປັນໄວພົຈນ໌ຂອງພິກສຸຜູ້ຮ່ວມພຣະອຸປັຊຍາຍ໌ ຄໍາທີ່ເປັນໄວພົຈນ໌ຂອງພິກສຸຜູ້ຮ່ວມພຣະອາຈາຣຍ໌ ຄໍາທີ່ເປັນໄວພົຈນ໌ຂອງເພື່ອນພຣົມຈາຣີ ຄໍາທີ່ເປັນໄວພົຈນ໌ຂອງຄຣືຫັສຖ໌ ຄໍາທີ່ເປັນໄວພົຈນ໌ຂອງອຸບາສົກ ຄໍາທີ່ເປັນໄວພົຈນ໌ຂອງຄນວັດ ຄໍາທີ່ເປັນ

ໄອພິຈນ໌ຂອງສາມເນນ ຄຳທີ່ເປັນໄອພິຈນ໌ຂອງເດັຽຣະຖີຍ໌ ຄຳທີ່ເປັນໄອພິຈນ໌ຂອງສາວົກຂອງເດັຽຣະຖີຍ໌ ຄຳທີ່ເປັນໄອພິຈນ໌ຂອງຜູ້ບໍ່ແມ່ນສມນະ ຄຳທີ່ເປັນໄອພິຈນ໌ຂອງຜູ້ບໍ່ແມ່ນເຊື້ອສາຍພຣະສາກຍບຸດຣ ແມ່ນແຕ່ອື່ນໃດທີ່ມີຢູ່ ພິກສຸບອກໃຫ້ຜູ້ອື່ນຮູ້ດ້ວຍຄຳທີ່ເປັນໄອພິຈນ໌ເຫລົ່ານັ້ນ ອັນເປັນອາການ ເປັນລັກສນະ ເປັນສັນຍາລັກສນ໌

ພິກສຸທັງຫລາຍ ແມ່ນຢ່າງນີ້ ກໍຊື່ວ່າເປັນການເປີດເຜີຍຄວາມທໍ້ແທ້ ແລະເປັນການບອກຄືນສິກຂາ

## ລັກສນະທີ່ບອກຄືນສິກຂາແລ້ວບໍ່ເປັນອັນບອກຄືນ

[໕໔] ພິກສຸທັງຫລາຍ ຢ່າງໃດ ຊື່ວ່າບໍ່ເປັນການບອກຄືນສິກຂາ ຄື ພິກສຸຜູ້ວິກົລຈິຕ ບອກຄືນສິກຂາດ້ວຍຄຳທີ່ເປັນອາການ ເປັນລັກສນະ ເປັນສັນຍາລັກສນ໌ ຕາມທີ່ພິກສຸໃນທັມວິນັຍນີ້ບອກຄືນສິກຂາກັນ ຍ່ອມບໍ່ເປັນອັນບອກຄືນສິກຂາ ພິກສຸປົກຕິບອກຄືນສິກຂາຕໍ່ໜ້າພິກສຸຜູ້ວິກົລຈິຕ ຍ່ອມບໍ່ເປັນອັນບອກຄືນສິກຂາ ພິກສຸມີຈິຕປັ່ນປ່ວງບອກຄືນສິກຂາ ຍ່ອມບໍ່ເປັນອັນບອກຄືນສິກຂາ
ພິກສຸບອກຄືນສິກຂາຕໍ່ໜ້າພິກສຸມີຈິຕປັ່ນປ່ວງ ຍ່ອມບໍ່ເປັນອັນບອກຄືນສິກຂາ
ພິກສຸກະວົນກະວາຍເພາະເວທນາບອກຄືນສິກຂາ ຍ່ອມບໍ່ເປັນອັນບອກຄືນສິກຂາ
ພິກສຸບອກຄືນສິກຂາຕໍ່ໜ້າພິກສຸຜູ້ກະວົນກະວາຍເພາະເວທນາ ຍ່ອມບໍ່ເປັນອັນບອກຄືນສິກຂາ
ພິກສຸບອກຄືນສິກຂາຕໍ່ໜ້າເທວດາ ຍ່ອມບໍ່ເປັນອັນບອກຄືນສິກຂາ
ພິກສຸບອກຄືນສິກຂາຕໍ່ໜ້າສັຕວ໌ເດັຽຣະສານ ຍ່ອມບໍ່ເປັນອັນບອກຄືນສິກຂາ
ພິກສຸບອກຄືນສິກຂາຕໍ່ໜ້າຊາວມິລັກຂະ ດ້ວຍພາສາຊາວອາຣິຍກະ ຖ້າເຂົາບໍ່ເຂົ້າໃຈ ຍ່ອມບໍ່ເປັນອັນບອກຄືນສິກຂາ
ພິກສຸບອກຄືນສິກຂາຕໍ່ໜ້າຊາວອາຣິຍກະ ດ້ວຍພາສາຊາວມິລັກຂະ ຖ້າເຂົາບໍ່ເຂົ້າໃຈ ຍ່ອມບໍ່ເປັນອັນບອກຄືນສິກຂາ
ພິກສຸບອກຄືນສິກຂາຕໍ່ໜ້າຊາວອາຣິຍກະ ດ້ວຍພາສາຊາວອາຣິຍກະ ຖ້າເຂົາບໍ່ເຂົ້າໃຈ ຍ່ອມບໍ່ເປັນອັນບອກຄືນສິກຂາ
ພິກສຸບອກຄືນສິກຂາຕໍ່ໜ້າຊາວມິລັກຂະ ດ້ວຍພາສາຊາວມິລັກຂະ ຖ້າເຂົາບໍ່ເຂົ້າໃຈ ຍ່ອມບໍ່ເປັນອັນບອກຄືນສິກຂາ
ພິກສຸບອກຄືນສິກຂາ ໂດຍເວົ້າຫລິ້ນ ຍ່ອມບໍ່ເປັນອັນບອກຄືນສິກຂາ
ພິກສຸບອກຄືນສິກຂາ ໂດຍເວົ້າພົ້ງພາດພັ້ງພາດ ຍ່ອມບໍ່ເປັນອັນບອກຄືນສິກຂາ

ພິກສຸບໍ່ປະສົງຄ໌ຈະປະກາດ ແຕ່ປະກາດໃຫ້ໄດ້ຍິນ ຍ່ອມບໍ່ເປັນອັນບອກຄືນສິກຂາ
ພິກສຸປະສົງຄ໌ຈະປະກາດ ແຕ່ບໍ່ປະກາດໃຫ້ໄດ້ຍິນ ຍ່ອມບໍ່ເປັນອັນບອກຄືນສິກຂາ
ພິກສຸປະກາດແກ່ຜູ້ບໍ່ເຂົ້າໃຈຄວາມຫມາຍ ຍ່ອມບໍ່ເປັນອັນບອກຄືນສິກຂາ
ພິກສຸບໍ່ປະກາດແກ່ຜູ້ເຂົ້າໃຈຄວາມຫມາຍ ຍ່ອມບໍ່ເປັນອັນບອກຄືນສິກຂາ
ພິກສຸບໍ່ປະກາດໂດຍປະການທັງປວງ ຍ່ອມບໍ່ເປັນອັນບອກຄືນສິກຂາ

ພິກສຸທັງຫລາຍ ຢ່າງນີ້ ຊື່ວ່າບໍ່ເປັນອັນບອກຄືນສິກຂາ

## ສິກຂາບົທວິພັງຄ໌

[໕໕] ທີ່ຊື່ວ່າ ເມຖຸນທັມ ໄດ້ແກ່ ອສັທທັມ ຊຶ່ງເປັນປະເວນີຂອງຊາວບ້ານ ມາຣຍາທຂອງຄົນຊັ້ນຕ່ຳ ກິຣິຍາຊົ່ວຫຍາບ ມີນ້ຳເປັນທີ່ສຸດ ເປັນກິຈທີ່ຈະຕ້ອງກະທຳໃນທີ່ລັບ ຕ້ອງກະທຳກັນສອງຕໍ່ສອງ ນີ້ຊື່ວ່າເມຖຸນທັມ

ທີ່ຊື່ວ່າ ເສພ ໄດ້ແກ່ ພິກສຸໃດ ສອດເຄື່ອງຫມາຍເພສເຂົ້າໄປທາງເຄື່ອງຫມາຍເພສ ສອດອົງຄຊາຕເຂົ້າໄປທາງອົງຄ໌ກຳເນີດ ໂດຍທີ່ສຸດເຂົ້າໄປແມ່ນແຕ່ພຽງເມັດງາ ພິກສຸນີ້ຊື່ວ່າ ເສພ

ຄຳວ່າ ໂດຍທີ່ສຸດແມ່ນແຕ່ກັບສັຕວ໌ເດັຽຣະສານໂຕແມ່ ຄວາມວ່າ ພິກສຸເສພເມຖຸນທັມແມ່ນແຕ່ກັບສັຕວ໌ເດັຽຣະສານໂຕແມ່ ກໍບໍ່ເປັນສມນະ ບໍ່ເປັນເຊື້ອສາຍພຣະສັກຍບຸຕຣ ຈະກ່າວໄປຫຍັງຮອດການເສພກັບຍິງມນຸສຍ໌ລະ ດັ່ງນັ້ນພຣະຜູ້ມີພຣະພາຄຈຶ່ງຕຣັສວ່າ ໂດຍທີ່ສຸດແມ່ນກັບສັຕວ໌ເດັຽຣະສານໂຕແມ່

ຄຳວ່າ ເປັນປາຣາຊິກ ຄວາມວ່າ ພິກສຸເສພເມຖຸນທັມ ຍ່ອມບໍ່ເປັນສມນະ ບໍ່ເປັນເຊື້ອສາຍພຣະສັກຍບຸຕຣ ປຽບເຫມືອນຄົນຖືກຕັດສີສະ ບໍ່ອາຈມີຊີວິຕຢູ່ໄດ້ ໂດຍການຕໍ່ສຣີສະເຂົ້າກັບຮ່າງກາຍນັ້ນ ດ້ວຍເຫຕຸນັ້ນ ພຣະຜູ້ມີພຣະພາຄຈຶ່ງຕຣັສວ່າ ເປັນປາຣາຊິກ

ຄຳວ່າ ຫາສັງວາສບໍ່ໄດ້ ອທິບາຍວ່າ ທີ່ຊື່ວ່າ ສັງວາສ ໄດ້ແກ່ ກັມທີ່ທຳຮ່ວມກັນ ອຸທເທສທີ່ສວດຮ່ວມກັນ ຄວາມມີສິກຂາສເມີກັນ ນີ້ຊື່ວ່າ ສັງວາສ ສັງວາສນັ້ນບໍ່ມີກັບພິກສຸຮູບນັ້ນ ດ້ວຍເຫຕຸນັ້ນ ພຣະຜູ້ມີພຣະພາຄຈຶ່ງຕຣັສວ່າ ຫາສັງວາສບໍ່ໄດ້

## ບົທພາຊນີຍ໌

## ມັຄພາມວາຣ

[໕໒] ຍິງ ໓ ຈຳພວກ ຄື ຍິງມນຸສ຺ຍ໌ ຍິງອມນຸສ຺ຍ໌ ສັຕວ໌ເດັຽຣະສານໂຕແມ່ ອຸພ຺ໂຕພຍັຍ຺ຊນກ ໓ ຈຳພວກ ຄື ອຸພ຺ໂຕພຍັຍ຺ຊນກທີ່ເປັນມນຸສ຺ຍ໌ ອຸພ຺ໂຕພຍັຍ຺ຊນກທີ່ເປັນອມນຸສ຺ຍ໌ ແລະອຸພ຺ໂຕພຍັຍ຺ຊນກທີ່ເປັນສັຕວ໌ເດັຽຣະສານ

ບັນ຺ເຫ຺າະກ໌ (ຊາຍທີ່ຖູກຕອນ ຫລື ກະເທີຍ) ໓ ຈຳພວກ ຄື ກະເທີຍທີ່ເປັນມນຸສ຺ຍ໌ ກະເທີຍທີ່ເປັນອມນຸສ຺ຍ໌ ກະເທີຍທີ່ເປັນສັຕວ໌ເດັຽຣະສານ

ຊາຍ ໓ ຈຳພວກ ຄື ຊາຍທີ່ເປັນມນຸສ຺ຍ໌ ຊາຍທີ່ເປັນອມນຸສ຺ຍ໌ ສັຕວ໌ເດັຽຣະສານຕົວຜູ້

ຍິງ ໓ ຈຳພວກ ມີພວກລະ ໓ ທວາຣ

ພິກ຺ສຸເສພເມຖຸນທັມກັບຍິງມນຸສ຺ຍ໌ ໓ ທາງ ຄື ທວາຣໜັກ ທວາຣເບົາ ປາກ ຕ້ອງອາບັຕິປາຣາຊິກ

ພິກ຺ສຸເສພເມຖຸນທັມກັບຍິງອມນຸສ຺ຍ໌ ...ກັບສັຕວ໌ເດັຽຣະສານໂຕແມ່ ໓ ທາງ ຄື ທວາຣໜັກ ທວາຣເບົາ ປາກ ຕ້ອງອາບັຕິປາຣາຊິກ

ອຸພ຺ໂຕພຍັຍ຺ຊນກ (ຄົນມີ ໒ ເພສ຺) ໓ ຈຳພວກ ມີພວກລະ ໓ ທວາຣ

ພິກ຺ສຸເສພເມຖຸນທັມກັບອຸພ຺ໂຕພຍັຍ຺ຊນກທີ່ເປັນມນຸສ຺ຍ໌ ...ກັບອຸພ຺ໂຕພຍັຍ຺ຊນກທີ່ເປັນອມນຸສ຺ຍ໌ ...ກັບອຸພ຺ ໂຕພຍັຍ຺ຊນກທີ່ເປັນສັຕວ໌ເດັຽຣະສານ ໓ ທາງ ຄື ທວາຣໜັກ ທວາຣເບົາ ປາກ ຕ້ອງອາບັຕິປາຣາຊິກ

ກະເທີຍ ໓ ຈຳພວກ ມີພວກລະ ໒ ທວາຣ

ພິກ຺ສຸເສພເມຖຸນທັມກັບກະເທີຍທີ່ເປັນມນຸສ຺ຍ໌ ...ກັບກະເທີຍທີ່ເປັນອມນຸສ຺ຍ໌...ກັບກະເທີຍທີ່ເປັນສັຕວ໌ເດັຽຣະສານ ໒ ທາງ ຄື ທວາຣໜັກ ປາກ ຕ້ອງອາບັຕິປາຣາຊິກ

ຊາຍ ໓ ຈຳພວກ ມີພວກລະ ໒ ທວາຣ

ພິກ຺ສຸເສພເມຖຸນທັມກັບຊາຍທີ່ເປັນມນຸສ຺ຍ໌ ...ກັບຊາຍທີ່ເປັນອມນຸສ຺ຍ໌ ...ກັບສັຕວ໌ເດັຽຣະສານຕົວຜູ້ ໒ ທາງ ຄື ທວາຣໜັກ ປາກ ຕ້ອງອາບັຕິປາຣາຊິກ

ຕ້ອງອາບັຕິປາຣາຊິກທັງ ໓ ທວາຣ

[໕໗] ເມື່ອພິກສຸເກີດຄວາມຄິດຈະເສພເມຖຸນທັມ ສອດອົງຄຊາຕເຂົ້າທາງທວາຣຫນັກຂອງຍິງມນຸສສ໌ ຕ້ອງອາບັຕິປາຣາຊິກ ເມື່ອພິກສຸເກີດຄວາມຄິດຈະເສພເມຖຸນທັມ ສອດອົງຄຊາຕເຂົ້າທາງທວາຣເບົາ ຕ້ອງອາບັຕິປາຣາຊິກ ເມື່ອພິກສຸເກີດຄວາມຄິດຈະເສພເມຖຸນທັມ ສອດອົງຄຊາຕເຂົ້າທາງປາກຂອງຍິງມນຸສສ໌ ຕ້ອງອາບັຕິປາຣາຊິກ

ເມື່ອພິກສຸເກີດຄວາມຄິດຈະເສພເມຖຸນທັມ ສອດອົງຄຊາຕເຂົ້າທາງທວາຣຫນັກ ...ທວາຣເບົາ ... ທາງປາກຂອງຍິງອມນຸສສ໌... ຂອງສັຕວ໌ເດັຽຣະສານໂຕແມ່... ຂອງອຸພໂຕພຍັຍຊນກທີ່ເປັນມນຸສສ໌ ... ຂອງອຸພໂຕພຍັຍຊນກທີ່ເປັນອມນຸສສ໌... ຂອງອຸພໂຕພຍັຍຊນກທີ່ເປັນສັຕວ໌ເດັຽຣະສານ ຕ້ອງອາບັຕິປາຣາຊິກ

ເມື່ອພິກສຸເກີດຄວາມຄິດຈະເສພເມຖຸນທັມ ສອດອົງຄຊາຕເຂົ້າທາງທວາຣຫນັກ ...ທາງປາກຂອງກະເທີຍທີ່ເປັນມນຸສສ໌... ຂອງກະເທີຍທີ່ເປັນອມນຸສສ໌... ຂອງກະເທີຍທີ່ເປັນສັຕວ໌ເດັຽຣະສານ... ຂອງມນຸສສ໌ຜູ້ຊາຍ...ຂອງອມນຸສສ໌ຜູ້ຊາຍ... ຂອງສັຕວ໌ເດັຽຣະສານຕົວຜູ້ ຕ້ອງອາບັຕິປາຣາຊິກ

## ວ່າດ້ວຍເຣື່ອງບໍ່ມີເຄື່ອງຫຸ້ມ

[໕໘] ພວກພິກສຸຜູ້ເປັນສັຕຣູກັນ ພາຍິງມນຸສສ໌ມາຫາພິກສຸແລ້ວ ໃຊ້ທວາຣຫນັກນັ່ງທັບອົງຄຊາຕ ຖ້າພິກສຸຍິນດີຂນະກຳລັງສອດເຂົ້າໄປ ຍິນດີຂນະສອດເຂົ້າໄປແລ້ວ ຍິນດີຂນະຢຸດຢູ່ ຍິນດີຂນະຖອນອອກ ຕ້ອງອາບັຕິປາຣາຊິກ

ພວກພິກສຸຜູ້ເປັນສັຕຣູກັນ ພາຍິງມນຸສສ໌ມາຫາພິກສຸແລ້ວ ໃຊ້ທວາຣຫນັກນັ່ງທັບອົງຄຊາຕ ຖ້າພິກສຸບໍ່ຍິນດີຂນະກຳລັງສອດເຂົ້າໄປ ແຕ່ຍິນດີຂນະສອດເຂົ້າໄປແລ້ວ ຍິນດີຂນະຢຸດຢູ່ ຍິນດີຂນະຖອນອອກ ຕ້ອງອາບັຕິປາຣາຊິກ

ພວກພິກສຸຜູ້ເປັນສັຕຣູກັນ ພາຍິງມນຸສສ໌ມາຫາພິກສຸແລ້ວ ໃຊ້ທວາຣຫນັກນັ່ງທັບອົງຄຊາຕ ຖ້າພິກສຸບໍ່ຍິນດີຂນະກຳລັງສອດເຂົ້າໄປ ບໍ່ຍິນດີຂນະສອດເຂົ້າໄປແລ້ວ ແຕ່ຍິນດີຂນະຢຸດຢູ່ ຍິນດີຂນະຖອນອອກ ຕ້ອງອາບັຕິປາຣາຊິກ

ພວກພິກສຸຜູ້ເປັນສັຕຣູກັນ ພາຍິງມນຸສສ໌ມາຫາພິກສຸແລ້ວ ໃຊ້ທວາຣຫນັກນັ່ງທັບອົງຄຊາຕ ຖ້າພິກສຸບໍ່ຍິນດີຂນະກຳລັງສອດເຂົ້າໄປ ບໍ່ຍິນດີຂນະສອດເຂົ້າໄປແລ້ວ ບໍ່ຍິນດີຂນະຢຸດຢູ່ ແຕ່ຍິນດີຂນະຖອນອອກ ຕ້ອງອາບັຕິປາຣາຊິກ

ພວກພິກສຸຜູ້ເປັນສັຕຣູກັນ ພາຍິງມນຸສສ໌ມາຫາພິກສຸແລ້ວ ໃຊ້ທວາຣຫນັກນັ່ງທັບອົງຄຊາຕ ຖ້າພິກສຸບໍ່ຍິນດີຂນະກຳລັງສອດເຂົ້າໄປ ບໍ່ຍິນດີຂນະສອດເຂົ້າໄປແລ້ວ ບໍ່ຍິນດີຂນະຢຸດຢູ່ ບໍ່ຍິນດີ

ຂນະຖອນອອກ ບໍ່ຕ້ອງອາບັຕິ

ພວກພິກສຸຜູ້ເປັນສັຕຣູກັນ ພາຍິງມນຸສຍ໌ມາຫາພິກສຸແລ້ວ ໃຊ້ທວາຣເບົານັ່ງທັບອົງຄຊາຕ... ໃຊ້ປາກ ອົມອົງຄຊາຕ ຖ້າພິກສຸຍິນດີຂນະກຳລັງສອດເຂົ້າໄປ ຍິນດີຂນະສອດເຂົ້າໄປແລ້ວ ຍິນດີຂນະຢຸດຢູ່ ຍິນດີຂນະຖອນອອກ ຕ້ອງອາບັຕິປາຣາຊິກ ຯລຯ ບໍ່ຍິນດີບໍ່ຕ້ອງອາບັຕິ

[໕໙] ພວກພິກສຸຜູ້ເປັນສັຕຣູກັນ ພາຍິງມນຸສຍ໌ຕື່ນ... ຍິງມນຸສຍ໌ຫລັບ... ຍິງມນຸສຍ໌ເມົາ... ຍິງມນຸສຍ໌ວິກົລຈິຕ... ຍິງມນຸສຍ໌ເຜີສຕິ... ຍິງມນຸສຍ໌ທີ່ຕາຍແລ້ວແຕ່ບໍ່ຖືກສັຕວ໌ກັດກິນ... ຍິງມນຸສຍ໌ທີ່ຕາຍແລ້ວແຕ່ບໍ່ຖືກສັຕວ໌ກັດກິນໂດຍມາກ ມາ ແລ້ວໃຊ້ທວາຣຫນັກນັ່ງທັບອົງຄຊາຕ... ໃຊ້ທວາຣເບົານັ່ງທັບອົງຄຊາຕ... ໃຊ້ປາກອົມອົງຄຊາຕ ຖ້າພິກສຸຍິນດີ ຕ້ອງອາບັຕິປາຣາຊິກ

ພວກພິກສຸຜູ້ເປັນສັຕຣູກັນ ພາຍິງມນຸສຍ໌ທີ່ຕາຍແລ້ວຊຶ່ງຖືກສັຕວ໌ກັດກິນໂດຍມາກ ມາຫາພິກສຸແລ້ວໃຊ້ທວາຣຫນັກນັ່ງທັບອົງຄຊາຕ... ໃຊ້ທວາຣເບົານັ່ງທັບອົງຄຊາຕ ໃຊ້ປາກອົມອົງຄຊາຕ ຖ້າພິກສຸຍິນດີຂນະກຳລັງສອດເຂົ້າໄປ ຍິນດີຂນະສອດເຂົ້າໄປແລ້ວ ຍິນດີຂນະຢຸດຢູ່ ຍິນດີຂນະຖອນອອກ ຕ້ອງອາບັຕິຖຸລລັຈຈັຍ ຯລຯ ບໍ່ຍິນດີບໍ່ຕ້ອງອາບັຕິ

ພວກພິກສຸຜູ້ເປັນສັຕຣູກັນ ພາຍິງອມນຸສຍ໌... ສັຕວ໌ເດັຽຣະສານໂຕແມ່... ອຸພໂຕພຍັຍຊນກທີ່ເປັນມນຸສຍ໌... ອຸພໂຕພຍັຍຊນກທີ່ເປັນອມນຸສຍ໌... ອຸພໂຕພຍັຍຊນກທີ່ເປັນສັຕວ໌ເດັຽຣະສານ ມາຫາພິກສຸ ແລ້ວໃຊ້ທວາຣຫນັກນັ່ງທັບອົງຄຊາຕ... ໃຊ້ທວາຣເບົານັ່ງທັບອົງຄຊາຕ... ໃຊ້ປາກອົມອົງຄຊາຕ ຖ້າພິກສຸຍິນດີຂນະກຳລັງສອດເຂົ້າໄປ ຍິນດີຂນະສອດເຂົ້າໄປແລ້ວ ຍິນດີຂນະຢຸດຢູ່ ຍິນດີຂນະຖອນອອກ ຕ້ອງອາບັຕິປາຣາຊິກ ຯລຯ ບໍ່ຍິນດີບໍ່ຕ້ອງອາບັຕິ

ພວກພິກສຸຜູ້ເປັນສັຕຣູກັນ ພາອຸພໂຕພຍັຍຊນກທີ່ເປັນສັຕວ໌ເດັຽຣະສານຕື່ນ... ອຸພໂຕພຍັຍຊນກທີ່ເປັນສັຕວ໌ເດັຽຣະສານຫລັບ... ອຸພໂຕພຍັຍຊນກທີ່ເປັນສັຕວ໌ເດັຽຣະສານເມົາ... ອຸພໂຕພຍັຍຊນກທີ່ເປັນສັຕວ໌ເດັຽຣະສານວິກົລຈິຕ... ອຸພໂຕພຍັຍຊນກທີ່ເປັນສັຕວ໌ເດັຽຣະສານເຜີສຕິ... ອຸພໂຕພຍັຍຊນກທີ່ເປັນສັຕວ໌ເດັຽຣະສານທີ່ຕາຍແລ້ວແຕ່ຍັງບໍ່ຖືກສັຕວ໌ກັດກິນ... ອຸພໂຕພຍັຍຊນກທີ່ເປັນສັຕວ໌ເດັຽຣະສານຕາຍແລ້ວແຕ່ບໍ່ຖືກສັຕວ໌ກັດກິນໂດຍມາກ ມາ ຯລຯ ຖ້າພິກສຸຍິນດີ... ຕ້ອງອາບັຕິປາຣາຊິກ ຯລຯ ອຸພໂຕພຍັຍຊນກທີ່ເປັນສັຕວ໌ເດັຽຣະສານຕາຍແລ້ວຖືກສັຕວ໌ກັດກິນໂດຍມາກມາຫາພິກສຸແລ້ວ ໃຊ້ທວາຣຫນັກນັ່ງທັບອົງຄຊາຕ... ໃຊ້ທວາຣເບົານັ່ງທັບອົງຄຊາຕ... ໃຊ້ປາກອົມອົງຄຊາຕ ຖ້າພິກສຸຍິນດີຂນະກຳລັງສອດເຂົ້າໄປ ຍິນດີຂນະສອດເຂົ້າໄປແລ້ວ ຍິນດີຂນະຢຸດຢູ່ ຍິນດີຂນະຖອນອອກ ຕ້ອງອາບັຕິຖຸລລັຈຈັຍ ຯລຯ ບໍ່ຍິນດີບໍ່ຕ້ອງອາບັຕິ

ພວກພິກສຸຜູ້ເປັນສັ້ຕຣູກັນ ພາກະເທີຍທີ່ເປັນມນຸສຍ໌... ກະເທີຍທີ່ເປັນອມນຸສຍ໌... ກະເທີຍທີ່ເປັນສັຕວ໌ເດັຽຣະສານ ມາຫາພິກສຸແລ້ວໃຊ້ທວາຣຫນັກນັ່ງທັບອົງຄຊາຕ... ໃຊ້ທວາຣເບົານັ່ງທັບອົງຄຊາຕ... ໃຊ້ປາກອົມອົງຄຊາຕ ຖ້າພິກສຸຍິນດີຂນະກຳລັງສອດເຂົ້າໄປ ຍິນດີຂນະສອດເຂົ້າໄປແລ້ວ ຍິນດີຂນະຢຸດຢູ່ ຍິນ ດີຂນະຖອນອອກ ຕ້ອງອາບັຕິປາຣາຊິກ ຯລຯ ບໍ່ຍິນດີ ບໍ່ຕ້ອງອາບັຕິ

ພວກພິກສຸຜູ້ເປັນສັ້ຕຣູກັນ ພາກະເທີຍທີ່ເປັນສັຕວ໌ເດັຽຣະສານຕື່ນ... ກະເທີຍທີ່ເປັນສັຕວ໌ເດັຽຣະສານຫລັບ... ກະເທີຍທີ່ເປັນສັຕວ໌ເດັຽຣະສານເມົາ... ກະເທີຍທີ່ເປັນສັຕວ໌ເດັຽຣະສານວິກົລຈິຕ... ກະເທີຍທີ່ເປັນສັຕວ໌ເດັຽຣະສານເຜີສຕິ... ກະເທີຍທີ່ເປັນສັຕວ໌ເດັຽຣະສານທີ່ຕາຍແລ້ວແຕ່ຍັງບໍ່ຖືກສັຕວ໌ກັດກິນ... ກະເທີຍທີ່ເປັນສັຕວ໌ເດັຽຣະສານທີ່ຕາຍແລ້ວ ແຕ່ບໍ່ຖືກສັຕວ໌ກັດກິນໂດຍມາກມາ... ຖ້າພິກສຸຍິນດີ... ຕ້ອງອາບັຕິປາຣາຊິກ ຯລຯ ພາກະເທີຍທີ່ເປັນສັຕວ໌ເດັຽຣະສານທີ່ຕາຍແລ້ວຖືກສັຕວ໌ກັດກິນໂດຍມາກ ມາຫາພິກສຸແລ້ວໃຊ້ທວາຣຫນັກນັ່ງທັບອົງຄຊາຕ... ໃຊ້ປາກອົມອົງຄຊາຕ ຖ້າພິກສຸຍິນດີຂນະກຳລັງສອດເຂົ້າໄປ ຍິນດີຂນະສອດເຂົ້າໄປແລ້ວ ຍິນດີຂນະຢຸດຢູ່ ຍິນດີຂນະຖອນອອກ ຕ້ອງອາບັຕິຖຸລລັຈຈັຍ ຯລຯ ບໍ່ຍິນດີ ບໍ່ຕ້ອງອາບັຕິ

[໓໐] ພວກພິກສຸຜູ້ເປັນສັ້ຕຣູກັນ ພາມນຸສຍ໌ຜູ້ຊາຍ ຯລຯ ອມນຸສຍ໌ຜູ້ຊາຍ ຯລຯ ສັຕວ໌ເດັຽຣະສານຕົວຜູ້ມາຫາພິກສຸແລ້ວໃຊ້ທວາຣຫນັກ ນັ່ງທັບອົງຄຊາຕ... ໃຊ້ປາກອົມອົງຄຊາຕ ຖ້າພິກສຸຍິນດີຂນະກຳລັງສອດເຂົ້າໄປ ຍິນດີຂນະສອດເຂົ້າໄປແລ້ວ ຍິນດີຂນະຢຸດຢູ່ ຍິນດີຂນະຖອນອອກ ຕ້ອງອາບັຕິປາຣາຊິກ ຯລຯ ບໍ່ຍິນດີ ບໍ່ຕ້ອງອາບັຕິ

ພວກພິກສຸຜູ້ເປັນສັ້ຕຣູກັນ ພາສັຕວ໌ເດັຽຣະສານຕົວຜູ້ຕື່ນ... ສັຕວ໌ເດັຽຣະສານຕົວຜູ້ຫລັບ... ສັຕວ໌ເດັຽຣະສານຕົວຜູ້ເມົາ... ສັຕວ໌ເດັຽຣະສານຕົວຜູ້ວິກົລຈິຕ... ສັຕວ໌ເດັຽຣະສານຕົວຜູ້ເຜີສຕິ... ສັຕວ໌ເດັຽຣະສານຕົວຜູ້ທີ່ຕາຍແລ້ວແຕ່ຍັງບໍ່ຖືກສັຕວ໌ກັດກິນ... ສັຕວ໌ເດັຽຣະສານຕົວຜູ້ທີ່ຕາຍແລ້ວແຕ່ບໍ່ຖືກສັຕວ໌ກັດກິນໂດຍມາກມາ ຯລຯ ຖ້າພິກສຸຍິນດີ... ຕ້ອງອາບັຕິປາຣາຊິກ ຯລຯ

ພາສັຕວ໌ເດັຽຣະສານຕົວຜູ້ທີ່ຕາຍແລ້ວຖືກສັຕວ໌ກັດກິນໂດຍມາກ ມາຫາພິກສຸແລ້ວໃຊ້ທວາຣຫນັກນັ່ງທັບອົງຄຊາຕ... ໃຊ້ປາກອົມອົງຄຊາຕ ຖ້າພິກສຸຍິນດີຂນະກຳລັງສອດເຂົ້າໄປ ຍິນດີຂນະສອດເຂົ້າໄປແລ້ວ ຍິນດີຂນະຢຸດຢູ່ ຍິນດີຂນະຖອນອອກ ຕ້ອງອາບັຕິຖຸລລັຈຈັຍ ຯລຯ ບໍ່ຍິນດີ ບໍ່ຕ້ອງອາບັຕິ

ວ່າດ້ວຍເອື້ອງມີເຄື່ອງຫຸ້ມ

[໓໑] ພວກພິກສຸຜູ້ເປັນສັ້ຕຣູກັນ ພາຍິງມນຸສຍ໌ມາຫາພິກສຸແລ້ວໃຊ້ທວາຣໜັກນັ່ງທັບອົງຄຊາຕ... ໃຊ້ທວາຣເບົານັ່ງທັບອົງຄຊາຕ... ໃຊ້ປາກອົມອົງຄຊາຕ ຂອງຍິງມີເຄື່ອງຫຸ້ມຂອງພິກສຸບໍ່ມີ... ຂອງຍິງບໍ່ມີເຄື່ອງຫຸ້ມ ຂອງພິກສຸມີ... ຂອງຍິງມີເຄື່ອງຫຸ້ມ ຂອງພິກສຸກໍມີ... ຂອງຍິງບໍ່ມີເຄື່ອງຫຸ້ມ ຂອງພິກສຸກໍບໍ່ມີ ຖ້າພິກສຸຍິນດີຂນະກໍາລັງສອດເຂົ້າໄປ ຍິນດີຂນະສອດເຂົ້າໄປແລ້ວ ຍິນດີຂນະຢຸດຢູ່ ຍິນດີຂນະຖອນອອກ ຕ້ອງອາບັຕິປາຣາຊິກ ຯລຯ ບໍ່ຍິນດີ ບໍ່ຕ້ອງອາບັຕິ

ພວກພິກສຸຜູ້ເປັນສັ້ຕຣູກັນ ພາຍິງມນຸສຍ໌ຕື່ນ... ຍິງມນຸສຍ໌ຫລັບ... ຍິງມນຸສຍ໌ເມົາ... ຍິງມນຸສຍ໌ວິກົລຈິຕ... ຍິງມນຸສຍ໌ເຜີສຕິ... ຍິງມນຸສຍ໌ທີ່ຕາຍແລ້ວແຕ່ບໍ່ຖືກສັຕວ໌ກັດກິນ... ຍິງມນຸສຍ໌ທີ່ຕາຍແລ້ວແຕ່ບໍ່ຖືກສັຕວ໌ກັດກິນໂດຍມາກ ມາ ຯລຯ ຖ້າພິກສຸຍິນດີ ຕ້ອງອາບັຕິປາຣາຊິກ ຯລຯ ພາຍິງມນຸສຍ໌ທີ່ຕາຍແລ້ວຖືກສັຕວ໌ກັດກິນໂດຍມາກ ມາຫາພິກສຸແລ້ວໃຊ້ທວາຣໜັກນັ່ງທັບອົງຄຊາຕ ... ໃຊ້ທວາຣເບົານັ່ງທັບອົງຄຊາຕ... ໃຊ້ປາກອົມອົງຄຊາຕ ຂອງຍິງມີເຄື່ອງຫຸ້ມ ຂອງພິກສຸບໍ່ມີ... ຂອງຍິງບໍ່ມີເຄື່ອງຫຸ້ມ ຂອງພິກສຸມີ... ຂອງຍິງມີເຄື່ອງຫຸ້ມ ຂອງພິກສຸກໍມີ... ຂອງຍິງບໍ່ມີເຄື່ອງຫຸ້ມ ຂອງພິກສຸກໍບໍ່ມີ ຖ້າພິກສຸຍິນດີຂນະກໍາລັງສອດເຂົ້າໄປ ຍິນດີຂນະສອດເຂົ້າໄປແລ້ວ ຍິນດີຂນະຢຸດຢູ່ ຍິນດີຂນະຖອນອອກ ຕ້ອງອາບັຕິຖຸລລັຈຈັຍ ຯລຯ ບໍ່ຍິນດີ ບໍ່ຕ້ອງອາບັຕິ

ພວກພິກສຸຜູ້ເປັນສັ້ຕຣູກັນ ພາອມນຸສຍ໌ຜູ້ຍິງ... ສັຕວ໌ເດັຽຣະສານໂຕແມ່... ອຸພໂຕພຍັຍຊນກທີ່ເປັນມນຸສຍ໌... ອຸພໂຕພຍັຍຊນກທີ່ເປັນອມນຸສຍ໌... ອຸພໂຕພຍັຍຊນກທີ່ເປັນສັຕວ໌ເດັຽຣະສານ ມາຫາພິກສຸແລ້ວໃຫ້ໃຊ້ທວາຣໜັກນັ່ງທັບອົງຄຊາຕ... ໃຊ້ທວາຣເບົານັ່ງທັບອົງຄຊາຕ... ໃຊ້ປາກອົມອົງຄຊາຕ ຂອງອຸພໂຕພຍັຍຊນກທີ່ເປັນສັຕວ໌ເດັຽຣະສານມີເຄື່ອງຫຸ້ມ ຂອງພິກສຸບໍ່ມີ... ຂອງອຸພໂຕພຍັຍຊນກທີ່ເປັນສັຕວ໌ເດັຽຣະສານ ບໍ່ມີເຄື່ອງຫຸ້ມ ຂອງພິກສຸມີ... ຂອງອຸພໂຕພຍັຍຊນກທີ່ເປັນສັຕວ໌ເດັຽຣະສານມີເຄື່ອງຫຸ້ມ ຂອງພິກສຸກໍມີ... ຂອງອຸພໂຕພຍັຍຊນກທີ່ເປັນສັຕວ໌ເດັຽຣະສານບໍ່ມີເຄື່ອງຫຸ້ມ ຂອງພິກສຸກໍບໍ່ມີ ຖ້າພິກສຸນັ້ນຍິນດີຂນະກໍາລັງສອດເຂົ້າໄປ ຍິນດີຂນະສອດເຂົ້າໄປແລ້ວ ຍິນດີຂນະຢຸດຢູ່ ຍິນດີຂນະຖອນອອກ ຕ້ອງອາບັຕິປາຣາຊິກ ຯລຯ ບໍ່ຍິນດີ ບໍ່ຕ້ອງອາບັຕິ

ພວກພິກສຸຜູ້ເປັນສັ້ຕຣູກັນ ພາອຸພໂຕພຍັຍຊນກທີ່ເປັນສັຕວ໌ເດັຽຣະສານຕື່ນ... ອຸພໂຕພຍັຍຊນກທີ່ເປັນສັຕວ໌ເດັຽຣະສານຫລັບ... ອຸພໂຕພຍັຍຊນກທີ່ເປັນສັຕວ໌ເດັຽຣະສານເມົາ... ອຸພໂຕພຍັຍຊນກທີ່ເປັນສັຕວ໌ເດັຽຣະສານວິກົລຈິຕ... ອຸພໂຕພຍັຍຊນກທີ່ເປັນສັຕວ໌ເດັຽຣະສານເຜີສຕິ... ອຸພໂຕພຍັຍຊນກທີ່ເປັນສັຕວ໌ເດັຽຣະສານຕາຍແລ້ວແຕ່ຍັງບໍ່ຖືກສັຕວ໌ກັດກິນ... ອຸພໂຕພຍັຍຊນກທີ່

ເປັນສັຕວ໌ເດັຽຣະສານຕາຍແລ້ວແຕ່ຍັງບໍ່ຖືກສັຕວ໌ກັດກິນໂດຍມາກ ມາ ຯລຯ ຖ້າພິກສຸຍິນດີ ຕ້ອງອາບັຕິປາຣາຊິກ ຯລຯ

ພາອຸພໂຕພຍັຍຊນກທີ່ເປັນສັຕວ໌ເດັຽຣະສານຕາຍແລ້ວຖືກສັຕວ໌ກິນໂດຍມາກ ມາຫາພິກສຸແລ້ວໃຊ້ທວາຣຫນັກນັ່ງທັບອົງຄຊາຕ... ໃຊ້ທວາຣເບົານັ່ງທັບອົງຄຊາຕ... ໃຊ້ປາກອົມອົງຄຊາຕຂອງອຸພໂຕພຍັຍຊນກທີ່ເປັນສັຕວ໌ເດັຽຣະສານມີເຄື່ອງຫຸ້ມ ຂອງພິກສຸບໍ່ມີ... ຂອງອຸພໂຕພຍັຍຊນກທີ່ເປັນສັຕວ໌ເດັຽຣະສານບໍ່ມີເຄື່ອງຫຸ້ມຂອງພິກສຸມີ... ຂອງອຸພໂຕພຍັຍຊນກທີ່ເປັນສັຕວ໌ເດັຽຣະສານ ມີເຄື່ອງຫຸ້ມ ຂອງພິກສຸກໍມີ... ຂອງອຸພໂຕພຍັຍຊນກທີ່ເປັນສັຕວ໌ເດັຽຣະສານບໍ່ມີເຄື່ອງຫຸ້ມ ຂອງພິກສຸກໍບໍ່ມີ ຖ້າພິກສຸນັ້ນຍິນດີຂນະກຳລັງສອດເຂົ້າໄປ ຍິນດີຂນະສອດເຂົ້າໄປແລ້ວ ຍິນດີຂນະຢຸດຢູ່ ຍິນດີຂນະຖອນອອກ ຕ້ອງອາບັຕິຖຸລລັຈຈັຍ ຯລຯ ບໍ່ຍິນດີ ບໍ່ຕ້ອງອາບັຕິ

[໕໔] ພວກພິກສຸຜູ້ເປັນສັຕຣູກັນ ພາກະເທີຍທີ່ເປັນມນຸສຍ໌... ກະເທີຍທີ່ເປັນອມນຸສຍ໌... ກະເທີຍທີ່ເປັນສັຕວ໌ເດັຽຣະສານ... ມນຸສຍ໌ຜູ້ຊາຍ... ອມນຸສຍ໌ຜູ້ຊາຍ... ສັຕວ໌ເດັຽຣະສານຕົວຜູ້ ມາຫາພິກສຸແລ້ວໃຊ້ທວາຣຫນັກນັ່ງທັບອົງຄຊາຕ... ໃຊ້ປາກອົມອົງຄຊາຕຂອງສັຕວ໌ເດັຽຣະສານຕົວຜູ້ມີເຄື່ອງຫຸ້ມ ຂອງພິກສຸບໍ່ມີ... ຂອງສັຕວເດັຽຣະສານຕົວຜູ້ບໍ່ມີເຄື່ອງຫຸ້ມ ຂອງພິກສຸມີ... ຂອງສັຕວ໌ເດັຽຣະສານຕົວຜູ້ມີເຄື່ອງຫຸ້ມ ຂອງພິກສຸກໍມີ... ຂອງສັຕວ໌ເດັຽຣະສານຕົວຜູ້ບໍ່ມີເຄື່ອງຫຸ້ມ ຂອງພິກສຸກໍບໍ່ມີ ຖ້າພິກສຸນັ້ນຍິນດີຂນະກຳລັງສອດເຂົ້າໄປ ຍິນດີຂນະສອດເຂົ້າໄປແລ້ວ ຍິນດີຂນະຢຸດຢູ່ ຂນະຖອນອອກ ຕ້ອງອາບັຕິປາຣາຊິກ ຯລຯ ບໍ່ຍິນດີ ບໍ່ຕ້ອງອາບັຕິ

ພວກພິກສຸຜູ້ເປັນສັຕຣູ ພາສັຕວ໌ເດັຽຣະສານຕົວຜູ້ຕື່ນ... ສັຕວ໌ເດັຽຣະສານຕົວຜູ້ຫລັບ... ສັຕວ໌ເດັຽຣະສານຕົວຜູ້ເມົາ... ສັຕວ໌ເດັຽຣະສານຕົວຜູ້ວິກົລຈິຕ... ສັຕວ໌ເດັຽຣະສານຕົວຜູ້ເຜີສຕິ... ສັຕວ໌ເດັຽຣະສານຕົວຜູ້ ຕາຍແລ້ວແຕ່ຍັງບໍ່ຖືກສັຕວ໌ກັດກິນ... ສັຕວ໌ເດັຽຣະສານຕົວຜູ້ຕາຍແລ້ວບໍ່ຖືກສັຕວ໌ກັດກິນໂດຍມາກມາ ຯລຯ ຖ້າພິກສຸຍິນດີ ຕ້ອງອາບັຕິປາຣາຊິກ ຯລຯ ບາງພວກພາສັຕວ໌ເດັຽຣະສານຕົວຜູ້ທີ່ຕາຍແລ້ວຖືກສັຕວ໌ກັດກິນໂດຍ ມາກ ມາຫາພິກສຸແລ້ວໃຊ້ທວາຣຫນັກນັ່ງທັບອົງຄຊາຕ... ໃຊ້ປາກອົມອົງຄຊາຕ ຖ້າພິກສຸຍິນດີຂນະກຳລັງສອດເຂົ້າໄປ ຍິນດີຂນະສອດເຂົ້າໄປແລ້ວ ຍິນດີຂນະຢຸດຢູ່ ຍິນດີຂນະຖອນອອກ ຕ້ອງອາບັຕິຖຸລລັຈຈັຍ ຯລຯ ບໍ່ຍິນດີ ບໍ່ຕ້ອງອາບັຕິ

ວ່າດ້ວຍເຣື້ອງບໍ່ມີເຄື່ອງຫຸ້ມ

[໘໓] ພວກພິກສຸຜູ້ເປັນສັດຕູ ພາພິກສຸໄປຫາຍິງແລ້ວ ໃຫ້ໃຊ້ອົງຄຊາຕສອດເຂົ້າທາງທວາຣຫນັກ ທາງທວາຣເບົາ ທາງປາກ ຖ້າພິກສຸຍິນດີຂນະກຳລັງສອດເຂົ້າໄປ ຍິນດີຂນະສອດເຂົ້າໄປແລ້ວ ຍິນດີຂນະຢຸດຢູ່ ຍິນດີຂນະຖອນອອກ ຕ້ອງອາບັຕິປາຣາຊິກ ຯລຯ ບໍ່ຍິນດີ ບໍ່ຕ້ອງອາບັຕິ

ພວກພິກສຸຜູ້ເປັນສັດຕູກັນ ພາພິກສຸໄປຫາຍິງຕື່ນ... ຍິງຫລັບ... ຍິງເມົາ... ຍິງວິກົລຈິຕ... ຍິງເຜີສຕິ... ຍິງທີ່ຕາຍແລ້ວແຕ່ຍັງບໍ່ຖືກສັຕວ໌ກັດກິນ... ຍິງທີ່ຕາຍແລ້ວແຕ່ຍັງບໍ່ຖືກສັຕວ໌ກັດກິນໂດຍມາກ ຯລຯ ຖ້າພິກສຸຍິນດີ... ຕ້ອງອາບັຕິປາຣາຊິກ ຯລຯ

ພາພິກສຸໄປຫາຍິງທີ່ຕາຍແລ້ວ ຖືກສັຕວ໌ກັດກິນໂດຍມາກແລ້ວໃຊ້ອົງຄຊາຕສອດເຂົ້າທາງທວາຣຫນັກ... ທາງທວາຣເບົາ... ທາງປາກ ຖ້າພິກສຸຍິນດີຂນະກຳລັງສອດເຂົ້າໄປ ຍິນດີຂນະສອດເຂົ້າໄປແລ້ວ ຍິນດີຂນະຢຸດຢູ່ ຍິນດີຂນະຖອນອອກ ຕ້ອງອາບັຕິຖຸລລັຈຈັຍ ຯລຯ ບໍ່ຍິນດີ ບໍ່ຕ້ອງອາບັຕິ

ພວກພິກສຸຜູ້ເປັນສັດຕູກັນ ພາພິກສຸໄປຫາອມນຸສຍ໌ຜູ້ຍິງ... ສັຕວ໌ເດັຽຣະສານຕົວແມ່... ອຸພໂຕພຍັຢ ຊນກທີ່ເປັນມນຸສຍ໌... ອຸພໂຕພຍັຢຊນກທີ່ເປັນອມນຸສຍ໌... ອຸພໂຕພຍັຢຊນກທີ່ເປັນສັຕວ໌ເດັຽຣະສານ... ກະເທີຍທີ່ເປັນມນຸສຍ໌... ກະເທີຍທີ່ເປັນອມນຸສຍ໌... ກະເທີຍທີ່ເປັນສັຕວ໌ເດັຽຣະສານ... ມນຸສຍ໌ຜູ້ຊາຍ... ອມນຸສຍ໌ຜູ້ຊາຍ... ພາໄປຫາສັຕວ໌ເດັຽຣະສານຕົວຜູ້ແລ້ວໃຊ້ອົງຄຊາຕສອດເຂົ້າທາງທວາຣຫນັກ... ທາງປາກ... ຖ້າພິກສຸຍິນດີຂນະກຳລັງສອດເຂົ້າໄປ ຍິນດີຂນະສອດເຂົ້າໄປແລ້ວ ຍິນດີຂນະຢຸດຢູ່ ຍິນດີຂນະຖອນອອກຕ້ອງອາບັຕິປາຣາຊິກ ຯລຯ ບໍ່ຍິນດີ ບໍ່ຕ້ອງອາບັຕິ

ພວກພິກສຸຜູ້ເປັນສັດຕູກັນ ພາພິກສຸໄປຫາສັຕວ໌ເດັຽຣະສານຕົວຜູ້ຕື່ນ ...ສັຕວ໌ເດັຽຣະສານຕົວຜູ້ຫລັບ ...ສັຕວ໌ເດັຽຣະສານຕົວຜູ້ເມົາ...ສັຕວ໌ເດັຽຣະສານຕົວຜູ້ວິກົລຈິຕ...ສັຕວ໌ເດັຽຣະສານຕົວຜູ້ເຜີສຕິ...ສັຕວ໌ເດັຽຣະສານຕົວຜູ້ທີ່ຕາຍແລ້ວແຕ່ຍັງບໍ່ຖືກສັຕວ໌ກັດກິນ...ພາໄປຫາສັຕວ໌ເດັຽຣະສານຕົວຜູ້ທີ່ຕາຍແລ້ວແຕ່ຍັງບໍ່ຖືກສັຕວ໌ກັດກິນໂດຍມາກ ຖ້າພິກສຸຍິນດີ...ຕ້ອງອາບັຕິປາຣາຊິກ ຯລຯ

ບາງພວກພາພິກສຸໄປຫາສັຕວ໌ເດັຽຣະສານທີ່ຕາຍແລ້ວຖືກສັຕວ໌ກັດກິນໂດຍມາກ ແລ້ວໃຊ້ອົງຄ ຊາຕ ສອດເຂົ້າທາງທວາຣຫນັກ ...ທາງປາກ ຖ້າພິກສຸຍິນດີຂນະກຳລັງສອດເຂົ້າໄປ ຍິນດີຂນະສອດ ເຂົ້າໄປແລ້ວ ຍິນດີຂນະຢຸດຢູ່ ຍິນດີຂນະຖອນອອກ ຕ້ອງອາບັຕິຖຸລລັຈຈັຍ ຯລຯ ບໍ່ຍິນດີ ບໍ່ຕ້ອງອາບັຕິ

ວ່າດ້ວຍເອື້ອງມີເຄື່ອງຫຸ້ມ

[໗໔] ພວກພິກສຸຜູ້ເປັນສັຕຣູກັນພາພິກສຸໄປຫາຍິງແລ້ວໃຫ້ໃຊ້ອົງຄຊາຕສອດເຂົ້າທາງທວາຣໜັກ... ທາງທວາຣເບົາ... ທາງປາກ ຂອງພິກສຸມີເຄື່ອງຫຸ້ມ ຂອງຍິງບໍ່ມີ... ຂອງພິກສຸບໍ່ມີເຄື່ອງຫຸ້ມ ຂອງຍິງມີ... ຂອງພິກສຸມີເຄື່ອງຫຸ້ມ ຂອງຍິງກໍ່ມີ... ຂອງພິກສຸບໍ່ມີເຄື່ອງຫຸ້ມ ຂອງຍິງກໍ່ບໍ່ມີ ຖ້າພິກສຸຍິນດີຂນະກຳລັງສອດເຂົ້າໄປ ຍິນດີຂນະສອດເຂົ້າໄປແລ້ວ ຍິນດີຂນະຢຸດຢູ່ ຍິນດີຂນະຖອນອອກ ຕ້ອງອາບັຕິປາຣາຊິກ ຯລຯ ບໍ່ຍິນດີບໍ່ຕ້ອງອາບັຕິ

ພວກພິກສຸຜູ້ເປັນສັຕຣູກັນ ພາພິກສຸໄປຫາຍິງຕື່ນ... ຍິງຫລັບ... ຍິງເມົາ... ຍິງວິກົລຈິຕ... ຍິງເຜີສຕິ... ຍິງທີ່ຕາຍແລ້ວແຕ່ຍັງບໍ່ຖືກສັຕວ໌ກັດກິນ... ຍິງທີ່ຕາຍແລ້ວແຕ່ຍັງບໍ່ຖືກສັຕວ໌ກັດກິນໂດຍມາກແລ້ວໃຊ້ອົງຄ ຊາຕສອດເຂົ້າທາງທວາຣໜັກ... ທາງທວາຣເບົາ... ທາງປາກ ຯລຯ ຖ້າພິກສຸຍິນດີ ຕ້ອງອາບັຕິປາຣາຊິກ ຯລຯ ບາງພວກພາພິກສຸໄປຫາຍິງທີ່ຕາຍແລ້ວຖືກສັຕວ໌ກັດກິນໂດຍມາກແລ້ວໃຫ້ໃຊ້ອົງຄຊາຕສອດເຂົ້າທາງທວາຣໜັກ... ທາງທວາຣເບົາ... ທາງປາກ ຖ້າພິກສຸຍິນດີຂນະກຳລັງສອດເຂົ້າໄປ ຍິນດີຂນະສອດເຂົ້າໄປແລ້ວ ຍິນດີຂນະຢຸດຢູ່ ຍິນດີຂນະຖອນອອກຕ້ອງອາບັຕິຖຸລລັຈຈັຍ ຯລຯ ບໍ່ຍິນດີ ບໍ່ຕ້ອງອາບັຕິ

ພວກພິກສຸຜູ້ເປັນສັຕຣູກັນ ພາພິກສຸໄປຫາອມນຸສຍ໌ຜູ້ຍິງ... ສັຕວ໌ເດັຽຣະສານໂຕແມ່... ອຸພໂຕພຍັຍຊນກທີ່ເປັນມນຸສຍ໌... ອຸພໂຕພຍັຍຊນກທີ່ເປັນອມນຸສຍ໌... ອຸພໂຕພຍັຍຊນກທີ່ເປັນສັຕວ໌ເດັຽຣະສານ...ກະ ເທີຍທີ່ເປັນມນຸສຍ໌... ກະເທີຍທີ່ເປັນອມນຸສຍ໌... ກະເທີຍທີ່ເປັນສັຕວ໌ເດັຽຣະສານ... ມນຸສຍ໌ຜູ້ຊາຍ...ອມນຸສຍ໌ຜູ້ຊາຍ... ພາໄປຫາສັຕວ໌ເດັຽຣະສານຕົວຜູ້ແລ້ວໃຊ້ອົງຄຊາຕສອດເຂົ້າທາງທວາຣໜັກ... ທາງປາກ ຂອງພິກສຸມີເຄື່ອງຫຸ້ມ ຂອງສັຕວ໌ເດັຽຣະສານຕົວຜູ້ບໍ່ມີ... ຂອງພິກສຸບໍ່ມີເຄື່ອງຫຸ້ມ ຂອງສັຕວ໌ເດັຽຣະສານຕົວຜູ້ມີ... ຂອງພິກສຸມີເຄື່ອງຫຸ້ມ ຂອງສັຕວ໌ເດັຽຣະສານຕົວຜູ້ກໍ່ມີ... ຂອງພິກສຸບໍ່ມີເຄື່ອງຫຸ້ມ ຂອງສັຕວ໌ເດັຽຣະສານຕົວຜູ້ກໍ່ບໍ່ມີ ຖ້າພິກສຸຍິນດີຂນະກຳລັງສອດເຂົ້າໄປ ຍິນດີຂນະສອດເຂົ້າໄປແລ້ວ ຍິນດີຂນະຢຸດຢູ່ຍິນດີຂນະຖອນອອກ ຕ້ອງອາບັຕິປາຣາຊິກ ຯລຯ ບໍ່ຍິນດີ ບໍ່ຕ້ອງອາບັຕິ

[໗໕] ພວກພິກສຸຜູ້ເປັນສັຕຣູກັນພາພິກສຸໄປຫາສັຕວ໌ເດັຽຣະສານຕົວຜູ້ຕື່ນ... ສັຕວ໌ເດັຽຣະສານຕົວຜູ້ຫລັບ... ສັຕວ໌ເດັຽຣະສານຕົວຜູ້ເມົາ... ສັຕວ໌ເດັຽຣະສານຕົວຜູ້ວິກົລຈິຕ... ສັຕວ໌ເດັຽຣະສານຕົວຜູ້ເຜີສຕິ... ສັຕວ໌ເດັຽຣະສານຕົວຜູ້ທີ່ຕາຍແລ້ວແຕ່ຍັງບໍ່ຖືກສັຕວ໌ກັດກິນ... ພາໄປຫາສັຕວ໌ເດັຽຣະສານຕົວຜູ້ທີ່ຕາຍແລ້ວແຕ່ບໍ່ຖືກສັຕວ໌ກັດກິນໂດຍມາກ ຯລຯ ຖ້າພິກສຸຍິນດີ ຕ້ອງອາບັຕິປາຣາຊິກ ຯລຯ ພາພິກສຸໄປຫາສັຕວ໌ເດັຽຣະສານຕົວຜູ້ທີ່ຕາຍແລ້ວຖືກສັຕວ໌ກັດກິນໂດຍມາກແລ້ວ

ໃຊ້ອົງຄຊາຕສອດເຂົ້າທາງທວາຣຫນັກ... ທາງປາກ ຂອງສັຕວ໌ເດັຣັຈສານຕົວຜູ້ມີເຄື່ອງຫຸ້ມ ຂອງພິກສຸບໍ່ມີ... ຂອງສັຕວ໌ເດັຣັຈສານຕົວຜູ້ບໍ່ມີເຄື່ອງຫຸ້ມ ຂອງພິກສຸມີ... ຂອງສັຕວ໌ເດັຣັຈສານຕົວຜູ້ມີເຄື່ອງຫຸ້ມ ຂອງພິກສຸກໍມີ... ຂອງສັຕວ໌ເດັຣັຈສານຕົວຜູ້ບໍ່ມີເຄື່ອງຫຸ້ມ ຂອງພິກສຸກໍບໍ່ມີ ຖ້າພິກສຸຍິນດີຂນະກຳລັງສອດເຂົ້າໄປ ຍິນດີຂນະສອດເຂົ້າໄປແລ້ວ ຍິນດີຂນະຢຸດຢູ່ ຍິນດີຂນະຖອນອອກ ຕ້ອງອາບັຕິຖຸລລັຈຈັຍ ຯລຯ ບໍ່ຍິນດີ ບໍ່ຕ້ອງອາບັຕິ

ພວກພຣະຣາຊາຜູ້ເປັນສັຕຣູ ພວກໂຈຣຜູ້ເປັນສັຕຣູ ພວກນັກເລງຜູ້ເປັນສັຕຣູ ພວກຄວັກຫົວໃຈທີ່ເປັນສັຕຣູ ກໍເພິ່ງຂຍາຍໃຫ້ພິສດາຣເຫມືອນພວກພິກສຸຜູ້ເປັນສັຕຣູທີ່ໃຫ້ພິສດາຣມາແລ້ວ ສັນນັ້ນ

[໕໕] ພິກສຸສອດອົງຄຊາຕເຂົ້າມັຄທາງມັຄ ຕ້ອງອາບັຕິປາຣາຊິກ ພິກສຸສອດອົງຄຊາຕເຂົ້າອມັຄທາງມັຄ ຕ້ອງອາບັຕິປາຣາຊິກ ພິກສຸສອດອົງຄຊາຕເຂົ້າມັຄທາງອມັຄ ຕ້ອງອາບັຕິປາຣາຊິກ ພິກສຸສອດອົງຄຊາຕເຂົ້າ ອມັຄທາງອມັຄ ຕ້ອງອາບັຕິຖຸລລັຈຈັຍ ພິກສຸລັກຫລັບພິກສຸທີ່ກຳລັງຫລັບ ທ່ານຕື່ນຂຶ້ນຍິນດີ ເພິ່ງໃຫ້ສິກເສັຽທັງສອງຮູບ ຫາກທ່ານຕື່ນຂຶ້ນແຕ່ບໍ່ຍິນດີ ໃຫ້ສິກສະເພາະພິກສຸຮູບທີ່ທຳຜິດ

ພິກສຸລັກຫລັບສາມເນຣທີ່ກຳລັງຫລັບ ສາມເນຣຕື່ນຂຶ້ນຍິນດີ ເພິ່ງໃຫ້ສິກເສັຽທັງສອງຮູບ ຫາກສາມເນຣຕື່ນຂຶ້ນແຕ່ບໍ່ຍິນດີ ເພິ່ງໃຫ້ສິກສະເພາະພິກສຸຮູບທີ່ທຳຜິດ

ສາມເນຣລັກຫລັບພິກສຸທີ່ກຳລັງຫລັບ ທ່ານຕື່ນຂຶ້ນຍິນດີ ເພິ່ງໃຫ້ສິກເສັຽທັງສອງຮູບ ຫາກທ່ານຕື່ນຂຶ້ນແຕ່ບໍ່ຍິນດີ ເພິ່ງໃຫ້ສິກສະເພາະສາມເນຣຮູບທີ່ທຳຜິດ

ສາມເນຣລັກຫລັບສາມເນຣທີ່ກຳລັງຫລັບ ທ່ານຕື່ນຂຶ້ນຍິນດີ ເພິ່ງໃຫ້ສິກເສັຽທັງສອງຮູບ ຫາກທ່ານຕື່ນຂຶ້ນແຕ່ບໍ່ຍິນດີ ເພິ່ງໃຫ້ສິກສະເພາະສາມເນຣຮູບທີ່ທຳຜິດ

## ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
໑. ພິກສຸບໍ່ຮູ້ສຶກຕົວ
໒. ພິກສຸບໍ່ຍິນດີ
໓. ພິກສຸວິກົລຈິຕ
໔. ພິກສຸມີຈິຕປັ່ນປ່ວງ

໕. ພິກຂຸຜູ້ກະວິນກະວາຍເພາະເວທນາ

໖. ພິກຂຸຕື່ນບັນຢັຕ

ສັນຖຸຕພານວາຣ ຈົບ

ຄາຖາຮວມວິນິຕວັຕຖຸ
ເຣື້ອງທີ່ຊີ້ງວິນິຈສັຍແລ້ວ

ເຣື້ອງລີງໂຕແມ່ ໑ ເຣື້ອງ, ເຣື້ອງພວກພິກຂຸວັຊຊີບຸຕຣ ໑ ເຣື້ອງ, ເຣື້ອງປອມເປັນຄຣີຫັສຖ໌ ໑ ເຣື້ອງ, ເຣື້ອງເປືອຍກາຍ ໑ ເຣື້ອງ, ເຣື້ອງປອມເປັນເດັຽຣະຖີຍ໌ ໆ ເຣື້ອງ, ເຣື້ອງເດັກຍິງ ໑ ເຣື້ອງ, ເຣື້ອງພິກຂຸນີອຸບົລວັຣຣນາ ໑ ເຣື້ອງ, ເຣື້ອງເພສກັບ ໔ ເຣື້ອງ, ເຣື້ອງມາຣດາ ໑ ເຣື້ອງ, ເຣື້ອງທິດາ ໑ ເຣື້ອງ, ເຣື້ອງນ້ອງສາວ ໑ ເຣື້ອງ, ເຣື້ອງວດີຕພັຣຍາ ໑ ເຣື້ອງ, ເຣື້ອງພິກຂຸຫລັງອ່ອນ ໑ ເຣື້ອງ, ເຣື້ອງພິກຂຸ ວີງຄຊາຕຍາວ ໑ ເຣື້ອງ, ເຣື້ອງບາດແຜ ໔ ເຣື້ອງ, ເຣື້ອງຮູບປັ້ນ ໑ ເຣື້ອງ, ເຣື້ອງຕຸ໊ກຕາໄມ້ ໑ ເຣື້ອງ, ເຣື້ອງພຣະສຸນທອນ ໑ ເຣື້ອງ, ເຣື້ອງຍິງ ໔ ເຣື້ອງ, ເຣື້ອງປ່າຊ້າ ໕ ເຣື້ອງ, ເຣື້ອງກະດູກ ໑ ເຣື້ອງ, ເຣື້ອງນາງນາຄ ໑ ເຣື້ອງ, ເຣື້ອງນາງຍັກສິນີ ໑ ເຣື້ອງ, ເຣື້ອງນາງເຜດເຜດ ໑ ເຣື້ອງ, ເຣື້ອງກະເທີຍ ໑ ເຣື້ອງ, ເຣື້ອງພິກຂຸຜູ້ມີກາຍປະສາທພິການ ໑ ເຣື້ອງ, ເຣື້ອງຈັບຕ້ອງ ໑ ເຣື້ອງ, ເຣື້ອງພຣະອຣຫັນຕ໌ຊາວເມືອງພັທທິຍະຫລັບ ໑ ເຣື້ອງ, ເຣື້ອງພິກຂຸຊາວກຸງສາວັຕຖີ ໔ ເຣື້ອງ, ເຣື້ອງພິກຂຸຊາວມັລລະກຸງເວສາລີ ໓ ເຣື້ອງ, ເຣື້ອງພິກຂຸເປີດປະຕູຈຳວັດ ໑ ເຣື້ອງ, ເຣື້ອງພິກຂຸຊາວເມືອງພາຣຸກັຈສະຝັນ ໑ ເຣື້ອງ, ເຣື້ອງອຸບາສິກາຊື່ສຸປັພພາ ໒ ເຣື້ອງ, ເຣື້ອງອຸບາສິກາຊື່ສັທທາ ໒ ເຣື້ອງ, ເຣື້ອງພິກຂຸນີ ໑ ເຣື້ອງ, ເຣື້ອງສິກຂມານາ ໑ ເຣື້ອງ, ເຣື້ອງສາມເນຣີ ໑ ເຣື້ອງ, ເຣື້ອງຍິງແພສຍາ ໑ ເຣື້ອງ, ເຣື້ອງພິກຂຸກະເທີຍ ໑ ເຣື້ອງ, ເຣື້ອງຍິງຄຣືຫັສຖ໌ ໑ ເຣື້ອງ, ເຣື້ອງໃຫ້ພິກຂຸຜັດກັນ ໑ ເຣື້ອງ, ເຣື້ອງພຣະຂຣົວຕາ ໑ ເຣື້ອງ, ເຣື້ອງລູກເນື້ອ ໑ ເຣື້ອງ.

ວິນີຕວັຕຖຸ
ເຣື້ອງລີງໂຕແມ່ ໑ ເຣື້ອງ

[໖໗] ສມັຍນັ້ນ ພິກສຸຮູບນຶ່ງເສພເມຖຸນທັມກັບນາງລີງ ເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັດສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໑)

## ເຣື່ອງພວກພິກສຸວັຊຊີບຸຕຣ ໑ ເຣື່ອງ

ສມັຍນັ້ນ ພວກພິກສຸວັຊຊີບຸຕຣຊາວກຸງເວສາລີຫລາຍຮູບ ຍັງບໍ່ບອກຄືນສິກຂາ ບໍ່ເປີດເຜີຍຄວາມທໍ້ແທ້ພາກັນເສພເມຖຸນທັມ ເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັດສິກຂາບົທໄວ້ແລ້ວ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ພວກທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໒)

## ເຣື່ອງປອມເປັນຄຣືຫັສຖ໌ ໑ ເຣື່ອງ

ສມັຍນັ້ນ ພິກສຸຮູບນຶ່ງ ປອມເປັນຄຣືຫັສຖ໌ໄປເສພເມຖຸນທັມດ້ວຍຄິດວ່າ ຢ່າງນີ້ ເຮົາຈະບໍ່ຕ້ອງອາບັຕິ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັດສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໓)

## ເຣື່ອງເປືອຍກາຍ ໑ ເຣື່ອງ

ສມັຍນັ້ນ ພິກສຸຮູບນຶ່ງ ເປືອຍກາຍໄປເສພເມຖຸນທັມດ້ວຍຄິດວ່າ ຢ່າງນີ້ ເຮົາຈະບໍ່ຕ້ອງອາບັຕິ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັດສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກ ຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໔)

## ເຣື່ອງປອມເປັນເດັຽຣະຖີຍ໌ ໗ ເຣື່ອງ

ສມັຍນັ້ນ ພິກສຸຮູບນຶ່ງ ນຸ່ງຄາກຮອງໄປເສພເມຖຸນທັມ ດ້ວຍຄິດວ່າ ຢ່າງນີ້ ເຮົາຈະບໍ່ຕ້ອງອາບັຕິ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັດສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ

“ພິກສຸ ທ່ານຕ້ອງອາບັຕິປາຣາຊິກ” (ເຣື້ອງທີ ໕)

ສມັຍນັ້ນ ພິກສຸຮູບນຶ່ງ ນຸ່ງເປືອກໄມ້ກຣອງໄປເສພເມຖຸນທັມດ້ວຍຄິດວ່າ ຢ່າງນີ້ເຮົາຈະບໍ່ຕ້ອງອາບັຕິ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ “ພິກສຸ ທ່ານຕ້ອງອາບັຕິປາຣາຊິກ” (ເຣື້ອງທີ ໖)

ສມັຍນັ້ນ ພິກສຸຮູບນຶ່ງ ນຸ່ງຜ້າແຜ່ນກະດານກຣອງ ໄປເສພເມຖຸນທັມດ້ວຍຄິດວ່າ ຢ່າງນີ້ເຮົາຈະບໍ່ຕ້ອງອາບັຕິ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ “ພິກສຸ ທ່ານຕ້ອງອາບັຕິປາຣາຊິກ” (ເຣື້ອງທີ ໗)

ສມັຍນັ້ນ ພິກສຸຮູບນຶ່ງ ນຸ່ງຜ້າຖັກດ້ວຍຜົມຄົນໄປເສພເມຖຸນທັມດ້ວຍຄິດວ່າ ຢ່າງນີ້ ເຮົາຈະບໍ່ຕ້ອງອາບັຕິ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ “ພິກສຸ ທ່ານຕ້ອງອາບັຕິປາຣາຊິກ” (ເຣື້ອງທີ ໘)

ສມັຍນັ້ນ ພິກສຸຮູບນຶ່ງ ນຸ່ງຜ້າຖັກດ້ວຍຂົນຈາມຣີໄປເສພເມຖຸນທັມດ້ວຍຄິດວ່າ ຢ່າງນີ້ ເຮົາຈະບໍ່ຕ້ອງອາບັຕິ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ “ພິກສຸ ທ່ານຕ້ອງອາບັຕິປາຣາຊິກ” (ເຣື້ອງທີ ໙)

ສມັຍນັ້ນ ພິກສຸຮູບນຶ່ງ ນຸ່ງຜ້າຖັກດ້ວຍຂົນປີກນົກເຄົ້າໄປເສພເມຖຸນທັມດ້ວຍຄິດວ່າ ຢ່າງນີ້ເຮົາຈະບໍ່ຕ້ອງອາບັຕິ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ “ພິກສຸ ທ່ານຕ້ອງອາບັຕິປາຣາຊິກ” (ເຣື້ອງທີ ໑໐)

ສມັຍນັ້ນ ພິກສຸຮູບນຶ່ງ ນຸ່ງຫນັງເສືອໄປເສພເມຖຸນທັມດ້ວຍຄິດວ່າ ຢ່າງນີ້ ເຮົາຈະບໍ່ຕ້ອງອາບັຕິ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກ ຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ “ພິກສຸ ທ່ານຕ້ອງອາບັຕິປາຣາຊິກ” (ເຣື້ອງທີ ໑໑)

ເຣື້ອງເດັກຍິງ ໑ ເຣື້ອງ

ສະໄໝນັ້ນ ພິກສຸຮູບນຶ່ງທ່ຽວບິນທຸບາຕ ເຫັນເດັກຍິງນອນເທິງຕັ່ງ ເກີດຄວາມກຳຫນັດຈຶ່ງສອດນີ້ວໂປ້ເຂົ້າໃນອົງຄ໌ກຳເນີດເດັກຍິງ ເດັກຍິງນັ້ນຕາຍ ທ່ານເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄ ຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິສັງຄາທິເສສ" (ເຣື່ອງທີ ໑໔)

## ເຣື້ອງພິກສຸນີອຸບົລວຣຣນາ ໑ ເຣື້ອງ

[໕໗] ສະໄໝນັ້ນ ຊາຍຫນຸ່ມຄົນນຶ່ງມີຄວາມຮັກໃຄ່ພິກສຸນີອຸບົລວຣຣນາ ມື້ນຶ່ງ ເມື່ອພິກສຸນີໄປບິນທຸບາຕໃນຫມູ່ບ້ານ ຈຶ່ງເຂົ້າໄປລີ້ຢູ່ໃນກຸຕິ ພິກສຸນີອຸບົລວຣຣນາກັບຈາກບິນທຸບາຕ ຫລັງຈາກສັນອາຫາຣ ລ້າງຕີນແລ້ວເຂົ້າກຸຕິ ນັ່ງເທິງຕຽງ ທັນໃດນັ້ນເຂົາຈຶ່ງອອກມາຂົ່ມຂືນພິກສຸນີ ພິກສຸນີໄປບອກພິກສຸນີທັງຫລາຍ ພິກສຸນີທັງຫລາຍຈຶ່ງບອກເຣື້ອງນັ້ນແກ່ພິກສຸທັງຫລາຍ ພິກສຸທັງຫລາຍຈຶ່ງນຳເຣື້ອງນັ້ນໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ພິກສຸນີອຸບົລວຣຣນານັ້ນບໍ່ຍິນດີ ບໍ່ຕ້ອງອາບັຕິ" (ເຣື່ອງທີ ໑໕)

## ເຣື້ອງເພສກັບ ໔ ເຣື້ອງ

[໕໘] ສະໄໝນັ້ນ ພິກສຸຮູບນຶ່ງ ເພສກັບກາຍເປັນຍິງ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ມີພຣະພຸທທານຸຍາຕວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ຖືອຸປັຊຍາຍ໌ເດີມ ໃຫ້ຖືອຸປສົມບົທເດີມ ນັບພັນສາເດີມ ແລະໃຫ້ຢູ່ຮ່ວມກັບພິກສຸນີທັງຫລາຍໄດ້ ເຮົາອນຸຍາຕໃຫ້ປົງອາບັຕິຂອງພິກສຸທັງຫລາຍທີ່ທົ່ວໄປກັບພິກສຸນີທັງຫລາຍໃນສຳນັກພິກສຸນີ ທ່ານບໍ່ຕ້ອງອາບັຕິຂອງພິກສຸທັງຫລາຍທີ່ບໍ່ທົ່ວໄປກັບພິກສຸນີທັງຫລາຍ" (ເຣື່ອງທີ ໑໔)

ສະໄໝນັ້ນ ພິກສຸນີຮູບນຶ່ງ ເພສກັບກາຍເປັນຊາຍ ພິກສຸທັງຫລາຍ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ມີພຣະພຸທທານຸຍາຕວ່າ "ເຮົາອນຸຍາຕໃຫ້ຖືອຸປັຊຍາຍ໌ເດີມ ໃຫ້ຖືອຸປສົມບົທເດີມ ນັບພັນສາເດີມແລະໃຫ້ຢູ່ຮ່ວມກັບພິກສຸທັງຫລາຍໄດ້ ເຮົາອນຸຍາຕໃຫ້ປົງອາບັຕິຂອງພິກສຸນີທັງຫລາຍທີ່ທົ່ວໄປກັບພິກສຸໃນສຳນັກພິກສຸ ທ່ານບໍ່ຕ້ອງອາບັຕິຂອງພິກສຸນີທັງຫລາຍທີ່ບໍ່ທົ່ວໄປກັບພິກສຸທັງຫລາຍ" (ເຣື້ອງທີ ໑໕)

## ເຣື້ອງມາຣດາ ໑ ເຣື້ອງ

[໗໐] ສມັຍນັ້ນ ພິກສຸຮູບນຶ່ງ ເສພເມຖຸນທັມກັບມາຣດາ ດ້ວຍຄິດວ່າ ຢ່າງນີ້ເຮົາຈະບໍ່ຕ້ອງອາບັຕິ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິ ປາຣາຊິກ ຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາ ບັຕິປາຣາຊິກ" (ເຣື້ອງທີ ໑໕)

ເຣື້ອງທິດາ ໑ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງ ເສພເມຖຸນທັມກັບທິດາ ດ້ວຍຄິດວ່າ ຢ່າງນີ້ ເຮົາຈະບໍ່ຕ້ອງອາບັຕິ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິ ປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໑໗)

ເຣື້ອງນ້ອງສາວ ໑ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງ ເສພເມຖຸນທັມກັບນ້ອງສາວດ້ວຍຄິດວ່າ ຢ່າງນີ້ ເຮົາຈະບໍ່ຕ້ອງ ອາບັຕິ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງ ອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໑໗)

ເຣື້ອງອດີຕພັຣຍາ ໑ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງ ເສພເມຖຸນທັມກັບອດີຕພັຣຍາ ດ້ວຍຄິດວ່າ ຢ່າງນີ້ ເຮົາຈະບໍ່ຕ້ອງ ອາບັຕິ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງ ອາບັຕິປາຣາຊິກ ຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໑໙)

ເຣື້ອງພິກສຸຫລັງອ່ອນ ໑ ເຣື້ອງ

[໗໑] ສມັຍນັ້ນ ພິກສຸຫລັງອ່ອນຮູບນຶ່ງ ມີຄວາມກຳຫນັດມາກ ໃຊ້ປາກອົມອົງຄຊາຕຂອງຕົນ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິ

ປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ “ພິກສຸ ທ່ານຕ້ອງອາບັຕິປາຣາຊິກ” (ເຣື້ອງທີ ໔໐)

## ເຣື້ອງພິກສຸອົງຄຊາຕຍາວ ໑ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງມີອົງຄຊາຕຍາວ ມີຄວາມກຳຫນັດມາກ ສອດອົງຄຊາຕເຂົ້າທາງ ທວາຣຫນັກຂອງຕົນແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາ ຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ “ພິກສຸ ທ່ານຕ້ອງອາບັຕິປາຣາຊິກ” (ເຣື້ອງທີ ໔໑)

## ເຣື້ອງບາດແຜ ໔ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງພົບສົບມີບາດແຜຢູ່ໃກ້ອົງຄ໌ກຳເນີດ ຈຶ່ງສອດອົງຄຊາຕເຂົ້າໃນອົງຄ໌ ກຳເນີດສົບແລ້ວຖອນອອກທາງບາດແຜດ້ວຍຄິດວ່າ ຢ່າງນີ້ເຮົາຈະບໍ່ຕ້ອງອາບັຕິ ແລ້ວເກີດຄວາມ ກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງ ນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ “ພິກສຸ ທ່ານຕ້ອງອາບັຕິ ປາຣາຊິກ” (ເຣື້ອງທີ ໔໒)

ສມັຍນັ້ນ ພິກສຸຮູບນຶ່ງພົບສົບມີບາດແຜຢູ່ໃກ້ອົງຄ໌ກຳເນີດ ຈຶ່ງສອດອົງຄຊາຕເຂົ້າໃນບາດ ແຜແລ້ວຖອນອອກທາງອົງຄ໌ກຳເນີດສົບດ້ວຍຄິດວ່າ ຢ່າງນີ້ເຮົາຈະບໍ່ຕ້ອງອາບັຕິ ແລ້ວເກີດຄວາມ ຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ “ພິກສຸ ທ່ານຕ້ອງ ອາບັຕິປາຣາຊິກ” (ເຣື້ອງທີ ໔໓)

## ເຣື້ອງຮູບປັ້ນ ໑ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງມີຄວາມກຳຫນັດ ໃຊ້ອົງຄຊາຕສງດສີເຄື່ອງຫມາຍເພສຮູບປັ້ນ ແລ້ວ ເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິ ປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ “ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິທຸກກຕ” (ເຣື້ອງທີ ໔໔)

## ເລື້ອງຕຸ໊ກຕາໄມ້ ໑ ເລື້ອງ

ສມັຍນັ້ນ ພິກສຸຮູບນຶ່ງມີຄວາມກຳໜັດ ໃຊ້ອົງຄຊາຕສງດສີເຄື່ອງໝາຍເພສຸຕຸ໊ກຕາໄມ້ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເລື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິທຸກກຕ" (ເລື້ອງທີ ໔໕)

## ເລື້ອງພຣະສຸນທອນ ໑ ເລື້ອງ

[໗໔] ສມັຍນັ້ນ ພຣະສຸນທອນເປັນຊາວກຸງຣາຊຄຶຫ໌ ບວຊດ້ວຍສັດທາ ຍ່າງໄປຕາມຖນົນ ຍິງຄົນນຶ່ງແນມເຫັນ ໄດ້ກ່າວກັບທ່ານວ່າ "ທ່ານນິມົນຕ໌ຖ້າຈັກບຶດ ຂະນ້ອຍຈະໄຫວ້" ນາງໄຫວ້ພ້ອມທັງເລີກອັນຕຣວາສກຂຶ້ນ ໃຊ້ປາກອົມອົງຄຊາຕ ທ່ານເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເລື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ

"ພິກສຸ ທ່ານຍິນດີຫລື"

"ບໍ່ຍິນດີ ພຣະພຸທທເຈົ້າຂ້າ"

"ພິກສຸ ທ່ານບໍ່ຍິນດີບໍ່ຕ້ອງອາບັຕິ" (ເລື້ອງທີ ໔໖)

## ເລື້ອງຍິງ ໔ ເລື້ອງ

ສມັຍນັ້ນ ຍິງຄົນນຶ່ງພົບພິກສຸແລ້ວກ່າວວ່າ "ນິມົນຕ໌ມາເສພເມຖຸນທັມກັນເຖີດ ຂະນ້ອຍ" "ຢ່າເລີຍນ້ອງຍິງ ເລື້ອງນີ້ບໍ່ສົມຄວຣ" "ນິມົນຕ໌ເຖີດຂະນ້ອຍ ຂະນ້ອຍຈະທຳເອງ ທ່ານບໍ່ຕ້ອງທຳ ຖ້າເຮັດຢ່າງນີ້ ທ່ານບໍ່ຕ້ອງອາບັຕິ" ທ່ານໄດ້ເຮັດຢ່າງນັ້ນ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເລື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເລື້ອງທີ ໔໗)

ສມັຍນັ້ນ ຍິງຄົນນຶ່ງພົບພິກສຸ ແລ້ວກ່າວວ່າ "ນິມົນຕ໌ມາເສພເມຖຸນທັມກັນເຖີດຂະນ້ອຍ" "ຢ່າເລີຍນ້ອງຍິງ ເລື້ອງນີ້ບໍ່ສົມຄວຣ" "ນິມົນຕ໌ເຖີດຂະນ້ອຍ ນິມົນຕ໌ທ່ານທຳ ຂະນ້ອຍບໍ່ຕ້ອງທຳ ຖ້າເຮັດຢ່າງນີ້ ທ່ານບໍ່ຕ້ອງອາບັຕິ" ທ່ານໄດ້ເຮັດຢ່າງນັ້ນ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີ

ພຣະພຸາຄຊົງບັນຍັດສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພຸາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໔໗)

ສມັຍນັ້ນ ຍິງຄົນນຶ່ງພົບພິກສຸ ແລ້ວກ່າວວ່າ "ນິມົນຕ໌ມາເສພເມຖຸນທັມກັນເຖີດຂະນ້ອຍ" "ຢ່າເລີຍນ້ອງຍິງ ເຣື້ອງນີ້ບໍ່ສົມຄວຣ" "ນິມົນຕ໌ເຖີດຂະນ້ອຍ ນິມົນຕ໌ພຍາຍາມພາຍໃນແລ້ວຫລັ່ງພາຍນອກ ຖ້າເຮັດຢ່າງນີ້ ທ່ານບໍ່ຕ້ອງອາບັຕິ" ທ່ານໄດ້ເຮັດຢ່າງນັ້ນ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພຸາຄຊົງບັນຍັດສິກຂາ ບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພຸາຄໃຫ້ຊົງຊາບ ພຣະ ອົງຄ໌ ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໔໙)

ສມັຍນັ້ນ ຍິງຄົນນຶ່ງ ພົບພິກສຸແລ້ວກ່າວວ່າ "ນິມົນຕ໌ມາເສພເມຖຸນທັມກັນເຖີດຂະນ້ອຍ" "ຢ່າເລີຍນ້ອງຍິງ ເຣື້ອງນີ້ບໍ່ສົມຄວຣ" "ນິມົນຕ໌ເຖີດຂະນ້ອຍ ນິມົນຕ໌ພຍາຍາມພາຍນອກແລ້ວຫລັ່ງພາຍໃນ ຖ້າເຮັດຢ່າງນີ້ ທ່ານບໍ່ຕ້ອງອາບັຕິ" ທ່ານໄດ້ເຮັດຢ່າງນັ້ນ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພຸາຄຊົງບັນຍັດສິກຂາ ບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພຸາຄໃຫ້ຊົງຊາບ ພຣະ ອົງຄ໌ ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໕໐)

## ເຣື້ອງປ່າຊ້າ ໕ ເຣື້ອງ

[໗໕] ສມັຍນັ້ນ ພິກສຸຮູບນຶ່ງໄປປ່າຊ້າ ເບິ່ງເຫັນສົພທີ່ຍັງບໍ່ຖືກສັຕວ໌ກັດກິນ ໄດ້ເສພເມຖຸນທັມໃນສົພນັ້ນ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພຸາຄຊົງບັນຍັດສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພຸາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໕໑)

ສມັຍນັ້ນ ພິກສຸຮູບນຶ່ງໄປປ່າຊ້າ ເບິ່ງເຫັນສົພຍັງບໍ່ຖືກສັຕວ໌ກັດກິນໂດຍມາກ ໄດ້ເສພເມຖຸນທັມໃນ ສົພນັ້ນ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພຸາຄຊົງບັນຍັດສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາ ຊິກ ຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພຸາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໕໔)

ສມັຍນັ້ນ ພິກສຸຮູບນຶ່ງໄປປ່າຊ້າ ເບິ່ງເຫັນສົພຖືກສັຕວ໌ກັດກິນໂດຍມາກ ໄດ້ເສພເມຖຸນທັມໃນສົພນັ້ນ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພຸາຄຊົງບັນຍັດສິກຂາບົທໄວ້ແລ້ວ ເຮົາ

ຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ" (ເຣື້ອງທີ ໖໖)

ສມັຍນັ້ນ ພິກສຸຮູບນຶ່ງໄປປ່າຊ້າ ເບິ່ງເຫັນສົພທີ່ສີສະຂາດຈຶ່ງສອດອົງຄຊາຕເຂົ້າໄປຕຳພາຍໃນປາກທີ່ອ້າ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກ ຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໖໔)

ສມັຍນັ້ນ ພິກສຸຮູບນຶ່ງໄປປ່າຊ້າ ເບິ່ງເຫັນສົພທີ່ສີສະຂາດຈຶ່ງສອດອົງຄຊາຕເຂົ້າພາຍໃນປາກທີ່ອ້າບໍ່ໃຫ້ຕຳຫຍັງ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິທຸກກຕ" (ເຣື້ອງທີ ໖໕)

## ເຣື້ອງກະດູກ ໑ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງຫລົງຮັກສຕຣີຄົນນຶ່ງ ຕໍ່ມານາງເສັຽຊີວິຕ ຖືກນຳໄປຖິ້ມໄວ້ໃນປ່າຊ້າ ກະດູກກະແຈກກະຈາຍ ມື້ນຶ່ງພິກສຸຮູບນັ້ນໄປປ່າຊ້າ ເກັບກະດູກຮວມເປັນຮ່າງ ຈໍ້າອົງຄຊາຕລົງທີ່ເຄື່ອງຫມາຍເພສ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິທຸກກຕ" (ເຣື້ອງທີ ໖໖)

## ເຣື້ອງນາງນາຄ ໑ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງເສພເມຖຸນທັມກັບນາງນາຄ ແລ້ວເກີດຄວາມກັງວົລໃຈວ່າພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ພຣະພາຄໃຫ້ຊົງ ຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໖໗)

## ເຣື້ອງນາງຍັກສິນີ ໑ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງເສພເມຖຸນທັມກັບນາງຍັກສີນີ ແລ້ວເກີດຄວາມກັງວົລໃຈວ່າພຣະຜູ້ມີພຣະພາຄ ຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໓໗)

## ເຣື້ອງນາງເຜດ ໑ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງເສພເມຖຸນທັມກັບນາງເຜດ ແລ້ວເກີດຄວາມກັງວົລໃຈວ່າພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໓໙)

## ເຣື້ອງກະເທີຍ ໑ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງເສພເມຖຸນທັມກັບກະເທີຍ ແລ້ວເກີດຄວາມກັງວົລໃຈວ່າພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງ ຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໔໐)

## ເຣື້ອງພິກສຸຜູ້ມີກາຍປະສາທພິກາຣ ໑ ເຣື້ອງ

ສມັຍນັ້ນ ພິກສຸຜູ້ມີກາຍປະສາທພິກາຣຮູບນຶ່ງຄິດວ່າ "ເຮົາບໍ່ຮູ້ສຶກສຸຂຫລືທຸກຂ໌ຈຶ່ງບໍ່ຕ້ອງອາບັຕິ" ຈຶ່ງເສພເມຖຸນທັມ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງບອກເຣື້ອງນີ້ໃຫ້ພິກສຸທັງຫລາຍຊາບ ພວກພິກສຸຈຶ່ງນຳເຣື້ອງນີ້ໄປຂາບທູລໃຫ້ພຣະຜູ້ມີພຣະພາຄຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ໂມຂບຸຣຸສນັ້ນຈະຮູ້ສຶກຫລືບໍ່ຮູ້ສຶກກໍຕາມ ກໍຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໔໑)

## ເຣື້ອງຈັບຕ້ອງ ໑ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງຄິດຈະເສພເມຖຸນທັມກັບຍິງ ແຕ່ຄັນພໍຈັບຕ້ອງເທົ່ານັ້ນກໍເກີດຄວາມເດືອດຮ້ອນໃຈ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັດສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກ ຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິທຸກກຕ" (ເຣື້ອງທີ ໔໘)

## ເຣື້ອງພຣະອຣຫັນຕ໌ຊາວເມືອງພັທທິຍະຫລັບ ໑ ເຣື້ອງ

[໗໔] ສມັຍນັ້ນ ພິກສຸຮູບນຶ່ງຈຳວັດກາງເວັນໃນປ່າຊາຕິຍາວັນ ເຂຕເມືອງພັທທິຍະ ຂນະທີ່ຈຳວັດຫລັບ ອວັຍວະທຸກສ່ວນຂອງທ່ານຖືກລົມພັດເພີນໃຫ້ແຂງຕົວ ຍິງຄົນນຶ່ງພົບເຂົ້າຈຶ່ງນັ່ງເຕັງອົງຄຊາຕ ກະທຳກາຣຈົນ ພໍໃຈແລ້ວຈາກໄປ ພິກສຸທັງຫລາຍເຫັນອົງຄຊາຕເປິເປື້ອນຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງ ຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ອົງຄຊາຕແຂງຕົວໄດ້ດ້ວຍເຫຕຸ ໕ ຢ່າງ ຄື ກຳຫນັດ ປວດອຸຈຈາຣະ ປວດປັສສາວະ ຖືກລົມໂພຍພັດ ຖືກບົ້ງຂົບ ອົງຄຊາຕຈະແຂງຕົວເພາະເຫຕຸ ໕ ຢ່າງນີ້ ພິກສຸທັງຫລາຍ ຂໍ້ທີ່ອົງຄຊາຕຂອງພິກສຸນັ້ນຈະແຂງຕົວເພາະຄວາມກຳຫນັດນັ້ນເປັນໄປບໍ່ໄດ້ ເພາະພິກສຸນັ້ນເປັນພຣະອຣຫັນຕ໌ ພິກສຸທັງຫລາຍ ພິກສຸນັ້ນບໍ່ຕ້ອງອາບັຕິ" (ເຣື້ອງທີ ໔໙)

## ເຣື້ອງພິກສຸຊາວກຸງສາວັຕຖີ ໔ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງ ຈຳວັດກາງເວັນໃນປ່າອັນທວັນ ເຂຕກຸງສາວັຕຖີ ຍິງລ້ຽງງົວຄົນນຶ່ງພົບເຂົ້າຈຶ່ງນັ່ງເຕັງອົງຄຊາຕ ທ່ານຍິນດີຂນະກຳລັງສອດເຂົ້າໄປ ຍິນດີຂນະສອດເຂົ້າໄປແລ້ວ ຍິນດີຂນະຢຸດຢູ່ ຍິນດີຂນະຖອນອອກ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັດສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໕໔)

ສມັຍນັ້ນ ພິກສຸຮູບນຶ່ງຈຳວັດກາງເວັນໃນປ່າອັນທວັນ ເຂຕກຸງສາວັຕຖີ ຍິງລ້ຽງແພະຄົນນຶ່ງພົບເຂົ້າຈຶ່ງນັ່ງເຕັງອົງຄຊາຕ ທ່ານຍິນດີຂນະກຳລັງສອດເຂົ້າໄປ ຍິນດີຂນະສອດເຂົ້າໄປແລ້ວ ຍິນດີຂນະຢຸດຢູ່ ຍິນດີຂນະຖອນອອກ ແລ້ວເກີດຄວາມກັງວົລໃຈວ່າພຣະຜູ້ມີພຣະພາຄຊົງບັນຍັດສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໕໕)

ສມັຍນັ້ນ ພິກສຸຮູບນຶ່ງຈຳວັດກາງເວັນໃນປ່າອັນທວັນ ເຂຕກຸງສາວັຕຖີ ຍິງຫາຟືນຄົນນຶ່ງ

ພົບເຂົ້າຈຶ່ງນັ່ງເຕັງອົງຄຊາຕ ທ່ານຍິນດີຂນະກຳລັງສອດເຂົ້າໄປ ຍິນດີຂນະສອດເຂົ້າໄປແລ້ວ ຍິນດີ ຂນະຢຸດຢູ່ ຍິນດີຂນະຖອນອອກ ແລ້ວເກີດຄວາມກັງວົລໃຈວ່າພຣະຜູ້ມີພຣະພາຄຊົງບັນຍັຕ ສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາ ຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄ ໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໔໒)

ສມັຍນັ້ນ ພິກສຸຮູບນຶ່ງຈຳວັດກາງເວັນໃນປ່າອັນທອັນ ເຂຕກຸງສາວັຕຖີ ຍິງຂີ້ນຂີ້ງົວຄົນນຶ່ງ ພົບເຂົ້າຈຶ່ງນັ່ງເຕັງອົງຄຊາຕ ທ່ານຍິນດີຂນະກຳລັງສອດເຂົ້າໄປ ຍິນດີຂນະສອດເຂົ້າໄປແລ້ວ ຍິນດີ ຂນະຢຸດຢູ່ ຍິນດີຂນະຖອນອອກ ແລ້ວເກີດຄວາມກັງວົລໃຈວ່າພຣະຜູ້ມີພຣະພາຄຊົງບັນຍັຕ ສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄ ໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໔໓)

## ເຣື້ອງພິກສຸຊາວມັລລະກຸງເວສາລີ ໓ ເຣື້ອງ

[໗໕] ສມັຍນັ້ນ ພິກສຸຮູບນຶ່ງຈຳວັດກາງເວັນໃນປ່າມຫາວັນ ເຂຕກຸງເວສາລີ ຍິງຄົນນຶ່ງພົບເຂົ້າຈຶ່ງ ນັ່ງເຕັງ ອົງຄຊາຕ ທຳກາຣຈົນພໍໃຈແລ້ວຍືນຫົວຍິ້ມຢູ່ໃກ້ໆ ພິກສຸນັ້ນຕື່ນຂຶ້ນມາ ກ່າວກັບຍິງນັ້ນວ່າ "ນີ້ເປັນກາຣກະທຳຂອງທ່ານຫລື" "ແມ່ນແລ້ວ ນີ້ເປັນກາຣກະທຳຂອງຂະນ້ອຍ" ທ່ານເກີດຄວາມ ກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງ ນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຮູ້ຫລື" "ບໍ່ຮູ້ ພຣະພຸທທເຈົ້າຂ້າ" "ພິກສຸທ່ານບໍ່ຮູ້ ບໍ່ຕ້ອງອາບັຕິ" (ເຣື້ອງທີ ໔໔)

[໗໖] ສມັຍນັ້ນ ພິກສຸຮູບນຶ່ງຈຳວັດກາງເວັນໃນປ່າມຫາວັນ ເຂຕກຸງເວສາລີ ຂນະທີ່ຈຳວັດຫລັບ ອົງຕົ້ນໄມ້ ຍິງຄົນນຶ່ງພົບເຂົ້າຈຶ່ງນັ່ງເຕັງອົງຄຊາຕ ທ່ານຣີບລຸກຂຶ້ນທັນທີແລ້ວເກີດຄວາມກັງວົລໃຈ ວ່າ ພຣະຜູ້ມີພຣະພາຄ ຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງ ນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຍິນດີຫລື" "ບໍ່ ຍິນດີ ພຣະພຸທທເຈົ້າຂ້າ" "ພິກສຸ ທ່ານບໍ່ຍິນດີ ບໍ່ຕ້ອງອາບັຕິ" (ເຣື້ອງທີ ໔໕)

ສມັຍນັ້ນ ພິກສຸຮູບນຶ່ງຈຳວັດກາງເວັນໃນປ່າມຫາວັນ ເຂຕກຸງເວສາລີ ຂນະທີ່ຈຳວັດຫລັບ ອົງຕົ້ນໄມ້ ຍິງຄົນນຶ່ງພົບເຂົ້າຈຶ່ງນັ່ງເຕັງອົງຄຊາຕ ທ່ານຍູ້ນາງກິ້ງໄປ ແລ້ວເກີດຄວາມກັງວົລໃຈ ວ່າ ເຮົາຕ້ອງອາບັຕິປາຣາ ຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຍິນດີຫລື" "ບໍ່ຍິນດີພຣະພຸທທເຈົ້າຂ້າ" "ພິກສຸ ທ່ານບໍ່ຍິນດີ ບໍ່ຕ້ອງອາບັຕິ" (ເຣື້ອງທີ ໕໐)

## ເຣື້ອງພິກສຸເປີດປະຕູຈໍາວັດ ໑ ເຣື້ອງ

[໗໗] ສມັຍນັ້ນ ພິກສຸຣູບນຶ່ງຈໍາວັດກາງເວັນໃນກູຕາຄາຣສາລາປ່າມຫາວັນ ເຂຕກຸງເວສາລີ ຂນະທີ່ເປີດປະຕູຈໍາວັດຫລັບ ອວັຍວະທຸກສ່ວນຂອງທ່ານຖືກລົມເພີຍພັດໃຫ້ແຂງຕົວ ຄັ້ງນັ້ນມີຍິງຫລາຍຄົນຖືຂອງຫອມແລະດອກໄມ້ພາກັນໄປອາຣາມ ເບິ່ງໄປທີ່ວິຫາຣ ເຫັນພິກສຸນັ້ນ ຈຶ່ງໄປນັ່ງເຕັງອົງຄຊາຕ ທໍາກາຣຈົນພໍໃຈແລ້ວ ກ່າວຊົມເຊີຍພິກສຸນັ້ນວ່າ "ເປັນຜູ້ຊາຍຍອດຍ້ຽມແທ້ໆ ຄົນນີ້" ຈາກນັ້ນໄດ້ຍົກຂອງຫອມແລະດອກໄມ້ພາກັນຈາກໄປ ພິກສຸທັງຫລາຍເຫັນອົງຄຊາຕ (ຂອງພິກສຸຜູ້ຫລັບ) ເປິເປື້ອນ ຈຶ່ງນໍາເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ອົງຄຊາຕແຂງຕົວໄດ້ດ້ວຍເຫຕຸ ໕ ຢ່າງ ຄື ກໍາຫນັດ ປວດອຸຈຈາຣະ ປວດປັສສາວະ ຖືກລົມເພີຍພັດ ຖືກບົ້ງຂົບ ອົງຄຊາຕຈະແຂງຕົວ ເພາະເຫຕຸ ໕ ຢ່າງນີ້ ພິກສຸທັງຫລາຍ ຂໍ້ທີ່ອົງຄຊາຕຂອງພິກສຸນັ້ນຈະແຂງຕົວເພາະຄວາມກໍາຫນັດນັ້ນ ເປັນໄປບໍ່ໄດ້ ເພາະພິກສຸນັ້ນ ເປັນພຣະອຣຫັນຕ໌ ພິກສຸທັງຫລາຍ ພິກສຸນັ້ນບໍ່ຕ້ອງອາບັຕິ ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸຜູ້ຈະຫລົກຫລົບພັກຜ່ອນກາງເວັນປິດປະຕູແລ້ວຈຶ່ງຫລົກຫລົບພັກຜ່ອນ" (ເຣື້ອງທີ ໕໑)

## ເຣື້ອງພິກສຸຊາວເມືອງພາຣຸກັຈສະຝັນ ໑ ເຣື້ອງ

[໗໘] ສມັຍນັ້ນ ພິກສຸຊາວເມືອງພາຣຸກັຈສະຣູບນຶ່ງ ຝັນວ່າໄດ້ເສພເມຖຸນທັມກັບອດີຕພັຣຍາ ຈຶ່ງຄິດວ່າ ເຮົາ ບໍ່ແມ່ນສມນະ ຈັກສິກ ຂນະຍ່າງໄປເມືອງພາຣຸກັຈສະ ໃນຣະຫວ່າງທາງພົບພຣະອຸບາລີ ຈຶ່ງຮຽນໃຫ້ທ່ານຊາບ ພຣະອຸບາລີຊີ້ແຈງວ່າ "ທ່ານ ພຽງຄວາມຝັນ ບໍ່ຕ້ອງອາບັຕິ" (ເຣື້ອງທີ ໕໔)

## ເຣື້ອງອຸບາສິກາຊື່ສຸປັພພາ ໙ ເຣື້ອງ

ສມັຍນັ້ນ ໃນກຸງຣາຊຄຶຫ໌ ມີອຸບາສິກາຄົນນຶ່ງຊື່ສຸປັພພາ ມີຄວາມເຫລື້ອມໃສແບບງົມງາຍ ມີຄວາມເຫັນຢ່າງນີ້ວ່າ ຍິງຜູ້ຖວາຍເມຖຸນທັມ ຊື່ວ່າໄດ້ຖວາຍທານອັນເລີສ ເມື່ອນາງພົບພິກສຸຣູ

ບນີ້ງຈື່ງ ກ່າວວ່າ "ນິມົນຕ໌ມາເສພເມຖຸນທັມກັນເຖີດຂະນ້ອຍ" "ຢ່າເລີຍນ້ອງຍິງ ເຣື້ອງນີ້ບໍ່ສົມຄວຣ" "ນິມົນຕ໌ເຖີດຂະນ້ອຍ ນິມົນຕ໌ສງຸດສີທີ່ຣະຫວ່າງຂາອ່ອນເຮັດຢ່າງນີ້ ທ່ານບໍ່ຕ້ອງອາບັຕິ" ທ່ານໄດ້ເຮັດຢ່າງນັ້ນ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາ ຊິກຫລືບໍ່ ຈື່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິສັງ ຂາທິເສສ" (ເຣື້ອງທີ ៥៣)

ສມັຍນັ້ນ ໃນກຸງຣາຊຄຶຫ໌ ມີອຸບາສິກາຄົນນື່ງຊື່ສຸປັພພາ ມີຄວາມເຫລື້ອມໃສແບບງົມງາຍ ມີຄວາມເຫັນຢ່າງນີ້ວ່າ ຍິງຜູ້ຖວາຍເມຖຸນທັມ ຊື່ວ່າໄດ້ຖວາຍທານອັນເລີສ ເມື່ອນາງພົບພິກສຸຮູບນື່ງ ຈື່ງກ່າວວ່າ "ນິມົນຕ໌ມາເສພເມຖຸນທັມກັນເຖີດຂະນ້ອຍ" "ຢ່າເລີຍນ້ອງຍິງ ເຣື້ອງນີ້ບໍ່ສົມຄວຣ" "ນິມົນຕ໌ເຖີດຂະນ້ອຍ ນິມົນຕ໌ສງຸດສີທີ່ສາຍບື ເຮັດຢ່າງນີ້ທ່ານບໍ່ຕ້ອງອາບັຕິ" ທ່ານໄດ້ເຮັດຢ່າງນັ້ນ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈື່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິສັງຂາທິເສສ" (ເຣື້ອງທີ ៥៤)

ສມັຍນັ້ນ ໃນກຸງຣາຊຄຶຫ໌ ມີອຸບາສິກາຄົນນື່ງຊື່ສຸປັພພາ ມີຄວາມເຫລື້ອມໃສແບບງົມງາຍ ມີຄວາມເຫັນຢ່າງນີ້ວ່າ ຍິງຜູ້ຖວາຍເມຖຸນທັມ ຊື່ວ່າໄດ້ຖວາຍທານອັນເລີສ ເມື່ອນາງພົບພິກສຸຮູບນື່ງ ຈື່ງ ກ່າວວ່າ "ນິມົນຕ໌ມາເສພເມຖຸນທັມກັນເຖີດຂະນ້ອຍ" "ຢ່າເລີຍນ້ອງຍິງ ເຣື້ອງນີ້ບໍ່ສົມຄວຣ" "ນິມົນຕ໌ເຖີດຂະນ້ອຍ ນິມົນຕ໌ສງຸດສີທີ່ຮ່ອງທ້ອງ ເຮັດຢ່າງນີ້ທ່ານບໍ່ຕ້ອງອາບັຕິ" ທ່ານໄດ້ເຮັດຢ່າງນັ້ນ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈື່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາ ຊິກ ແຕ່ຕ້ອງອາບັຕິສັງຂາທິ ເສສ" (ເຣື້ອງທີ ៥៥)

ສມັຍນັ້ນ ໃນກຸງຣາຊຄຶຫ໌ ມີອຸບາສິກາຄົນນື່ງຊື່ສຸປັພພາ ມີຄວາມເຫລື້ອມໃສແບບງົມງາຍ ມີຄວາມເຫັນຢ່າງນີ້ວ່າ ຍິງຜູ້ຖວາຍເມຖຸນທັມ ຊື່ວ່າໄດ້ຖວາຍທານອັນເລີສ ເມື່ອນາງພົບພິກສຸຮູບນື່ງ ຈື່ງກ່າວວ່າ "ນິມົນຕ໌ມາເສພເມຖຸນທັມກັນເຖີດຂະນ້ອຍ" "ຢ່າເລີຍນ້ອງຍິງ ເຣື້ອງນີ້ບໍ່ສົມຄວຣ" "ນິມົນຕ໌ເຖີດຂະນ້ອຍ ນິມົນຕ໌ສງຸດສີທີ່ຮ່ອງຂີ້ແຮ້ ເຮັດຢ່າງນີ້ທ່ານບໍ່ຕ້ອງອາບັຕິ" ທ່ານໄດ້ເຮັດຢ່າງນັ້ນ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາ ຊິກຫລືບໍ່ ຈື່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິສັງຂາທິເສສ" (ເຣື້ອງທີ ໕໕)

ສມັຍນັ້ນ ໃນກຸງຣາຊຄຶຫ໌ ມີອຸບາສິກາຄົນນຶ່ງຊື່ສຸປັພພາ ມີຄວາມເຫລື້ອມໃສແບບງົມງາຍ ມີຄວາມເຫັນຢ່າງນີ້ວ່າ ຍິງຜູ້ຖວາຍເມຖຸນທັມ ຊື່ວ່າໄດ້ຖວາຍທານອັນເລີສ ເມື່ອນາງພົບພິກສຸຣູບນຶ່ງ ຈຶ່ງກ່າວວ່າ "ນິມົນຕ໌ມາເສພເມຖຸນທັມກັນເຖີດຂະນ້ອຍ" "ຢ່າເລີຍນ້ອງຍິງ ເຣື້ອງນີ້ບໍ່ສົມຄວຣ" "ນິມົນຕ໌ເຖີດຂະນ້ອຍ ນິມົນຕ໌ສຽດສີທີ່ຄໍ ເຮັດຢ່າງນີ້ ທ່ານບໍ່ຕ້ອງອາບັຕິ" ທ່ານໄດ້ເຮັດຢ່າງນັ້ນ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິສັງຂາທິເສສ" (ເຣື້ອງທີ ໕໖)

ສມັຍນັ້ນ ໃນກຸງຣາຊຄຶຫ໌ ມີອຸບາສິກາຄົນນຶ່ງຊື່ສຸປັພພາ ມີຄວາມເຫລື້ອມໃສແບບງົມງາຍ ມີຄວາມເຫັນຢ່າງນີ້ວ່າ ຍິງຜູ້ຖວາຍເມຖຸນທັມ ຊື່ວ່າໄດ້ຖວາຍທານອັນເລີສ ເມື່ອນາງພົບພິກສຸຣູບນຶ່ງ ຈຶ່ງກ່າວວ່າ "ນິມົນຕ໌ມາເສພເມຖຸນທັມກັນເຖີດຂະນ້ອຍ" "ຢ່າເລີຍນ້ອງຍິງ ເຣື້ອງນີ້ບໍ່ສົມຄວຣ" "ນິມົນຕ໌ເຖີດຂະນ້ອຍ ນິມົນຕ໌ສຽດສີທີ່ຮ່ອງຫູ ເຮັດຢ່າງນີ້ທ່ານບໍ່ຕ້ອງອາບັຕິ" ທ່ານໄດ້ເຮັດຢ່າງນັ້ນ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິສັງຂາທິເສສ" (ເຣື້ອງທີ ໕໗)

ສມັຍນັ້ນ ໃນກຸງຣາຊຄຶຫ໌ ມີອຸບາສິກາຄົນນຶ່ງຊື່ສຸປັພພາ ມີຄວາມເຫລື້ອມໃສແບບງົມງາຍ ມີຄວາມເຫັນຢ່າງນີ້ວ່າ ຍິງຜູ້ຖວາຍເມຖຸນທັມ ຊື່ວ່າໄດ້ຖວາຍທານອັນເລີສ ເມື່ອນາງພົບພິກສຸຣູບນຶ່ງ ຈຶ່ງກ່າວວ່າ "ນິມົນຕ໌ມາເສພເມຖຸນທັມກັນເຖີດຂະນ້ອຍ" "ຢ່າເລີຍນ້ອງຍິງ ເຣື້ອງນີ້ບໍ່ສົມຄວຣ" "ນິມົນຕ໌ເຖີດຂະນ້ອຍ ນິມົນຕ໌ສຽດສີທີ່ມວຍຜົມ ເຮັດຢ່າງນີ້ທ່ານບໍ່ຕ້ອງອາບັຕິ" ທ່ານໄດ້ເຮັດຢ່າງນັ້ນ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາ ຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິສັງຂາທິເສສ" (ເຣື້ອງທີ ໕໘)

ສມັຍນັ້ນ ໃນກຸງຣາຊຄຶຫ໌ ມີອຸບາສິກາຄົນນຶ່ງຊື່ສຸປັພພາ ມີຄວາມເຫລື້ອມໃສແບບງົມງາຍ ມີຄວາມເຫັນຢ່າງນີ້ວ່າ ຍິງຜູ້ຖວາຍເມຖຸນທັມ ຊື່ວ່າໄດ້ຖວາຍທານອັນເລີສ ເມື່ອນາງພົບພິກສຸຣູ

ບນຶ່ງ ຈຶ່ງກ່າວວ່າ "ນິມົນຕ໌ມາເສພເມຖຸນທັມກັນເຖີດຂະນ້ອຍ" "ຢ່າເລີຍນ້ອງຍິງ ເຣື້ອງນີ້ບໍ່ສົມຄວຣ" "ນິມົນຕ໌ເຖີດຂະນ້ອຍ ນິມົນຕ໌ສຽດສີທີ່ງ່າມມື ເຮັດຢ່າງນີ້ທ່ານບໍ່ຕ້ອງອາບັຕິ" ທ່ານໄດ້ເຮັດຢ່າງນັ້ນ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິສັງຂາທິເສສ" (ເຣື້ອງທີ ៥໐)

ສມັຍນັ້ນ ໃນກຸງຣາຊຄຶຫ໌ ມີອຸບາສິກາຄົນນຶ່ງຊື່ສຸປັພພາ ມີຄວາມເຫລື້ອມໃສແບບງົມງາຍ ມີຄວາມເຫັນຢ່າງນີ້ວ່າ ຍິງຜູ້ຖວາຍເມຖຸນທັມ ຊື່ວ່າໄດ້ຖວາຍທານອັນເລີສ ເມື່ອນາງພົບພິກສຸຮູບນຶ່ງ ຈຶ່ງກ່າວວ່າ "ນິມົນຕ໌ມາເສພເມຖຸນທັມກັນເຖີດຂະນ້ອຍ" "ຢ່າເລີຍນ້ອງຍິງ ເຣື້ອງນີ້ບໍ່ສົມຄວຣ" "ນິມົນຕ໌ເຖີດຂະນ້ອຍ ຂະນ້ອຍຈະໃຊ້ມືພຍາຍາມປ່ອຍອສຸຈິໃຫ້ ເຮັດຢ່າງນີ້ ທ່ານບໍ່ຕ້ອງອາບັຕິ" ທ່ານໄດ້ເຮັດຢ່າງນັ້ນ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິສັງຂາທິເສສ" (ເຣື້ອງທີ ៥໑)

## ເຣື້ອງອຸບາສິກາຊື່ສັທທາ ໔ ເຣື້ອງ

[໗໔] ສມັຍນັ້ນ ໃນກຸງສາວັຕຖີ ມີອຸບາສິກາຄົນນຶ່ງຊື່ສັທທາ ມີຄວາມເຫລື້ອມໃສແບບງົມງາຍ ມີຄວາມເຫັນຢ່າງນີ້ວ່າ ຍິງຜູ້ຖວາຍເມຖຸນທັມ ຊື່ວ່າໄດ້ຖວາຍທານອັນເລີສ ເມື່ອນາງພົບພິກສຸຮູບນຶ່ງ ຈຶ່ງກ່າວວ່າ "ນິມົນຕ໌ມາເສພເມຖຸນທັມກັນເຖີດຂະນ້ອຍ" "ຢ່າເລີຍ ນ້ອງຍິງ ເຣື້ອງນີ້ບໍ່ສົມຄວຣ" "ນິມົນຕ໌ເຖີດຂະນ້ອຍ ນິມົນຕ໌ສຽດສີທີ່ຣະຫວ່າງຂາອ່ອນ ເຮັດຢ່າງນີ້ ທ່ານບໍ່ຕ້ອງອາບັຕິ" ທ່ານໄດ້ເຮັດຢ່າງນັ້ນແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາ ຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິສັງຂາທິເສສ" (ເຣື້ອງທີ ៥໔)

ສມັຍນັ້ນ ໃນກຸງຣາຊຄຶຫ໌ ມີອຸບາສິກາຄົນນຶ່ງຊື່ສັທທາ ມີຄວາມເຫລື້ອມໃສແບບງົມງາຍ ມີຄວາມເຫັນຢ່າງນີ້ວ່າ ຍິງຜູ້ຖວາຍເມຖຸນທັມ ຊື່ວ່າໄດ້ຖວາຍທານອັນເລີສ ເມື່ອນາງພົບພິກສຸຮູບນຶ່ງ ຈຶ່ງ ກ່າວວ່າ "ນິມົນຕ໌ມາເສພເມຖຸນທັມກັນເຖີດຂະນ້ອຍ" "ຢ່າເລີຍນ້ອງຍິງ ເຣື້ອງນີ້ບໍ່ສົມຄວຣ" "ນິມົນຕ໌ເຖີດຂະນ້ອຍ ນິມົນຕ໌ສຽດສີທີ່ສາຍບື ເຮັດຢ່າງນີ້ທ່ານບໍ່ຕ້ອງອາບັຕິ" ທ່ານໄດ້ເຮັດຢ່າງນັ້ນ

ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາ ຊິກ ແຕ່ຕ້ອງອາບັຕິສັງຂາທິເສສ" (ເຣື່ອງທີ ៦៣)

ສມັຍນຶ່ງ ໃນກຸງຣາຊຄຶຫ໌ ມີອຸບາສິກາຄົນນຶ່ງຊື່ສັທທາ ມີຄວາມເຫລື້ອມໃສແບບງົມງາຍ ມີຄວາມເຫັນຢ່າງນີ້ວ່າ ຍິງຜູ້ຖວາຍເມຖຸນທັມ ຊື່ວ່າໄດ້ຖວາຍທານອັນເລີສ ເມື່ອນາງພົບພິກສຸຮູບນຶ່ງ ຈຶ່ງ ກ່າວວ່າ "ນິມົນຕ໌ມາເສພເມຖຸນທັມກັນເຖີດຂະນ້ອຍ" "ຢ່າເລີຍນ້ອງຍິງ ເຣື້ອງນີ້ບໍ່ສົມຄວຣ" "ນິມົນຕ໌ເຖີດຂະນ້ອຍ ນິມົນຕ໌ສງດສີທຮ່ອງທ້ອງ ເຮັດຢ່າງນີ້ທ່ານບໍ່ຕ້ອງອາບັຕິ" ທ່ານໄດ້ເຮັດຢ່າງນັ້ນ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິສັງຂາທິເສສ" (ເຣື້ອງທີ ៦៤)

ສມັຍນຶ່ງ ໃນກຸງຣາຊຄຶຫ໌ ມີອຸບາສິກາຄົນນຶ່ງຊື່ສັທທາ ມີຄວາມເຫລື້ອມໃສແບບງົມງາຍ ມີຄວາມເຫັນຢ່າງນີ້ວ່າ ຍິງຜູ້ຖວາຍເມຖຸນທັມ ຊື່ວ່າໄດ້ຖວາຍທານອັນເລີສ ເມື່ອນາງພົບພິກສຸຮູບນຶ່ງ ຈຶ່ງ ກ່າວວ່າ "ນິມົນຕ໌ມາເສພເມຖຸນທັມກັນເຖີດຂະນ້ອຍ" "ຢ່າເລີຍນ້ອງຍິງ ເຣື້ອງນີ້ບໍ່ສົມຄວຣ" "ນິມົນຕ໌ເຖີດຂະນ້ອຍ ນິມົນຕ໌ສງດສີທີ່ຮ່ອງຂີ້ແຮ້ ເຮັດຢ່າງນີ້ທ່ານບໍ່ຕ້ອງອາບັຕິ" ທ່ານໄດ້ເຮັດຢ່າງນັ້ນ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິສັງຂາທິ ເສສ" (ເຣື່ອງທີ ៦៥)

ສມັຍນຶ່ງ ໃນກຸງຣາຊຄຶຫ໌ ມີອຸບາສິກາຄົນນຶ່ງຊື່ສັທທາ ມີຄວາມເສື່ອມໃສແບບງົມງາຍ ມີຄວາມເຫັນ ຢ່າງນີ້ວ່າ ຍິງຜູ້ຖວາຍເມຖຸນທັມ ຊື່ວ່າໄດ້ຖວາຍທານອັນເລີສ ເມື່ອນາງພົບພິກສຸຮູບນຶ່ງ ຈຶ່ງກ່າວວ່າ "ນິມົນຕ໌ມາເສພເມຖຸນທັມກັນເຖີດຂະນ້ອຍ" "ຢ່າເລີຍນ້ອງຍິງ ເຣື່ອງນີ້ບໍ່ສົມຄວຣ" "ນິມົນຕ໌ເຖີດຂະນ້ອຍ ນິມົນຕ໌ສງດສີທີ່ຄໍ ເຮັດຢ່າງນີ້ທ່ານບໍ່ຕ້ອງອາບັຕິ" ທ່ານໄດ້ເຮັດຢ່າງນັ້ນ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິສັງຂາທິເສສ" (ເຣື່ອງທີ ៦៦)

ສມັຍນຶ່ງ ໃນກຸງຣາຊຄຶຫ໌ ມີອຸບາສິກາຄົນນຶ່ງຊື່ສັທທາ ມີຄວາມເຫລື້ອມໃສແບບງົມງາຍ ມີຄວາມເຫັນ ຢ່າງນີ້ວ່າ ຍິງຜູ້ຖວາຍເມຖຸນທັມ ຊື່ວ່າໄດ້ຖວາຍທານອັນເລີສ ເມື່ອນາງພົບພິກສຸຮູບນຶ່ງ ຈຶ່ງກ່າວວ່າ "ນິມົນຕ໌ມາເສພເມຖຸນທັມກັນເຖີດຂະນ້ອຍ" "ຢ່າເລີຍນ້ອງຍິງ ເຣື່ອງ

ນີ້ບໍ່ສົມຄວຣ" "ນິມົນຕ໌ເຖີດຂະນ້ອຍ ນິມົນຕ໌ສຽດສີທີ່ຊ່ອງຫູ ເຮັດຢ່າງນີ້ ທ່ານບໍ່ຕ້ອງອາບັຕິ" ທ່ານໄດ້ເຮັດຢ່າງນັ້ນ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິສັງຂາທິເສສ" (ເຣື້ອງທີ ໕໗)

ສມັຍນຶ່ງ ໃນກຸງຣາຊຄຶຫ໌ ມີອຸບາສິກາຄົນນຶ່ງຊື່ສັທທາ ມີຄວາມເຫລື້ອມໃສແບບງົມງາຍ ມີຄວາມເຫັນ ຢ່າງນີ້ວ່າ ຍິງຜູ້ຖວາຍເມຖຸນທັມ ຊື່ວ່າໄດ້ຖວາຍທານອັນເລີສ ເມື່ອນາງພົບພິກສຸຮູບນຶ່ງ ຈຶ່ງກ່າວວ່າ "ນິມົນຕ໌ມາເສພເມຖຸນທັມກັນເຖີດຂະນ້ອຍ" "ຢ່າເລີຍນ້ອງຍິງ ເຣື້ອງນີ້ບໍ່ສົມຄວຣ" "ນິມົນຕ໌ເຖີດຂະນ້ອຍ ນິມົນຕ໌ສຽດສີທີ່ນອຍຜົມເຮັດຢ່າງນີ້ ທ່ານບໍ່ຕ້ອງອາບັຕິ" ທ່ານໄດ້ເຮັດຢ່າງນັ້ນ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິສັງຂາທິເສສ" (ເຣື້ອງທີ ໕໘)

ສມັຍນຶ່ງ ໃນກຸງຣາຊຄຶຫ໌ ມີອຸບາສິກາຄົນນຶ່ງຊື່ສັທທາ ມີຄວາມເຫລື້ອມໃສແບບງົມງາຍ ມີຄວາມເຫັນ ຢ່າງນີ້ວ່າ ຍິງຜູ້ຖວາຍເມຖຸນທັມ ຊື່ວ່າໄດ້ຖວາຍທານອັນເລີສ ເມື່ອນາງພົບພິກສຸຮູບນຶ່ງ ຈຶ່ງກ່າວວ່າ "ນິມົນຕ໌ມາເສພເມຖຸນທັມກັນເຖີດຂະນ້ອຍ" "ຢ່າເລີຍນ້ອງຍິງ ເຣື້ອງນີ້ບໍ່ສົມຄວຣ" "ນິມົນຕ໌ເຖີດຂະນ້ອຍ ນິມົນຕ໌ສຽດສີທີ່ງ່າມມື ເຮັດຢ່າງນີ້ທ່ານບໍ່ຕ້ອງອາບັຕິ" ທ່ານໄດ້ເຮັດຢ່າງນັ້ນ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄ ຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິສັງຂາທິເສສ" (ເຣື້ອງທີ ໕໙)

ສມັຍນຶ່ງ ໃນກຸງຣາຊຄຶຫ໌ ມີອຸບາສິກາຄົນນຶ່ງຊື່ສັທທາ ມີຄວາມເຫລື້ອມໃສແບບງົມງາຍ ມີຄວາມເຫັນ ຢ່າງນີ້ວ່າ ຍິງຜູ້ຖວາຍເມຖຸນທັມ ຊື່ວ່າໄດ້ຖວາຍທານອັນເລີສເມື່ອນາງພົບພິກສຸຮູບນຶ່ງ ຈຶ່ງກ່າວວ່າ "ນິມົນຕ໌ມາເສພເມຖຸນທັມກັນເຖີດຂະນ້ອຍ" "ຢ່າເລີຍ ນ້ອງຍິງ ເຣື້ອງນີ້ບໍ່ສົມຄວຣ" "ນິມົນຕ໌ເຖີດຂະນ້ອຍ ຂະນ້ອຍຈະໃຊ້ມືພຍາຍາມປ່ອຍອສຸຈິໃຫ້ ເຮັດຢ່າງນີ້ ທ່ານບໍ່ຕ້ອງອາບັຕິ" ທ່ານໄດ້ເຮັດຢ່າງນັ້ນ ແລ້ວເກີດຄວາມກັງວົລໃຈວ່າພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາ ບັຕິ ປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິສັງຂາທິ ເສສ" (ເຣື້ອງທີ ໖໐)

## ເຣື້ອງພິກສຸນີ ໑ ເຣື້ອງ

[໗໐] ສມັຍນັ້ນ ໃນກຸງເວສາລີ ເຈົ້າຊາຍລິຈສວີທັງຫລາຍຈັບພິກສຸໃຫ້ເສພເມຖຸນທັມກັບພິກສຸນີ ທ່ານທັງສອງຍິນດີ ເພິງໃຫ້ສິກເສັຽທັງຄູ່ ທັງສອງບໍ່ຍິນດີບໍ່ຕ້ອງອາບັຕິ (ເຣື້ອງທີ ໗໑)

## ເຣື້ອງສິກຂມານາ ໑ ເຣື້ອງ

ສມັຍນັ້ນ ໃນກຸງເວສາລີ ເຈົ້າຊາຍລິຈສວີທັງຫລາຍຈັບພິກສຸໃຫ້ເສພເມຖຸນທັມກັບ ສິກຂມານາ ທ່ານທັງສອງຍິນດີ ເພິງໃຫ້ສິກເສັຽທັງຄູ່ ທັງສອງບໍ່ຍິນດີບໍ່ຕ້ອງອາບັຕິ (ເຣື້ອງທີ ໗໔)

## ເຣື້ອງສາມເນຣີ ໑ ເຣື້ອງ

ສມັຍນັ້ນ ໃນກຸງເວສາລີ ເຈົ້າຊາຍລິຈສວີທັງຫລາຍ ຈັບພິກສຸໃຫ້ເສພເມຖຸນທັມກັບ ສາມເນຣີ ທ່ານທັງສອງຍິນດີ ເພິງໃຫ້ສິກເສັຽທັງຄູ່ ທັງສອງບໍ່ຍິນດີ ບໍ່ຕ້ອງອາບັຕິ (ເຣື້ອງທີ ໗໓)

## ເຣື້ອງຍິງແພສຍາ ໑ ເຣື້ອງ

[໗໑] ສມັຍນັ້ນ ໃນກຸງເວສາລີ ເຈົ້າຊາຍລິຈສວີທັງຫລາຍຈັບພິກສຸໃຫ້ເສພເມຖຸນທັມກັບຍິງ ແພສຍາ ພິກສຸຍິນດີ ເພິງໃຫ້ສິກເສັຽ ຖ້າບໍ່ຍິນດີ ບໍ່ຕ້ອງອາບັຕິ (ເຣື້ອງທີ ໗໔)

## ເຣື້ອງກະເທີຍ ໑ ເຣື້ອງ

ສມັຍນັ້ນ ໃນກຸງເວສາລີ ເຈົ້າຊາຍລິຈສວີທັງຫລາຍຈັບພິກສຸໃຫ້ເສພເມຖຸນທັມກັບກະເທີຍ ພິກສຸຍິນດີ ເພິງໃຫ້ສິກເສັຽ ຖ້າບໍ່ຍິນດີ ບໍ່ຕ້ອງອາບັຕິ (ເຣື້ອງທີ ໗໕)

## ເຣື້ອງຍິງຄຣີຫັສຖ໌ ໑ ເຣື້ອງ

ສມັຍນັ້ນ ໃນກຸງເວສາລີ ເຈົ້າຊາຍລິຈສວີທັງຫລາຍຈັບພິກສຸໃຫ້ເສພເມຖຸນທັມກັບຍິງຄຣີ ຫັສຖ໌ ພິກສຸຍິນດີ ເພິງໃຫ້ສິກເສັຽ ຖ້າບໍ່ຍິນດີ ບໍ່ຕ້ອງອາບັຕິ (ເຣື້ອງທີ ໗໖)

## ເຣື້ອງໃຫ້ພິກສຸຜັດກັນ ໑ ເຣື້ອງ

ສມັຍນັ້ນ ໃນກຸງເວສາລີ ເຈົ້າຊາຍລິຈສວີທັງຫລາຍຈັບພິກສຸໃຫ້ເສພເມຖຸນທັມກັບກັນແລະກັນ ທ່ານທັງສອງຍິນດີ ເພິງໃຫ້ສິກເສັງທັງຄູ່ ຖ້າບໍ່ຍິນດີ ບໍ່ຕ້ອງອາບັຕິ (ເຣື້ອງທີ ໗໗)

## ເຣື້ອງພຣະຂຣັວຕາ ໑ ເຣື້ອງ

[໗໘] ສມັຍນັ້ນ ພຣະຂຣັວຕາຮູບນຶ່ງໄປຍັງມອດິຕພັຣຍາ ຖືກບັງຄັບໃຫ້ສິກ ທ່ານຖອຍຫນີຈົນລົ້ມຫງາຍ ນາງຂຶ້ນເຕັງອົງຄຊາຕ ທ່ານເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຣົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຍິນດີຫລື" "ບໍ່ຍິນດີ ພຣະພຸທທເຈົ້າຂ້າ" "ພິກສຸ ທ່ານບໍ່ຍິນດີບໍ່ຕ້ອງອາບັຕິ" (ເຣື້ອງທີ ໗໘)

## ເຣື້ອງລູກເນື້ອ ໑ ເຣື້ອງ

[໗໙] ສມັຍນັ້ນ ພິກສຸຮູບນຶ່ງຢູ່ໃນປ່າ ລູກເນື້ອມາທີ່ຖ່າຍປັສສາວະຂອງທ່ານແລ້ວອົມອົງຄຊາຕ ພ້ອມທັງດື່ມນ້ຳປັສສາວະ ທ່ານຍິນດີ ເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຣົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ ພິກສຸທ່ານຕ້ອງອາບັຕິປາຣາຊິກ (ເຣື້ອງທີ ໗໙)

ປາຣາຊິກສິກຂາບົທທີ ໑ ຈົບ

□□□□□□ ສົມສັກ □□□□□□

## ພຣະວິນັຍປິດົກ ມຫາວິພັງຄ໌ [໑. ປາຣາຊິກກັນຫ໌] ປາຣາຊິກສິກຂາບົທທີ ໔ ເຣື້ອງພຣະທນີຍກຸມພກາຣບຸຕຣ

## ປາຣາຊິກສິກຂາບົທທີ ໔
## ວ່າດ້ວຍການຖືເອົາສິ່ງຂອງທີ່ເຈົ້າຂອງບໍ່ໄດ້ໃຫ້

## ເຣື້ອງພຣະທນີຍກຸມພກາຣບຸຕຣ

[໗໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພູເຂົາຄິຊຢກູຕ ເຂດກຸງຣາຊຄຶຫ໌ ພິກສຸ ຫລາຍຮູບເປັນເພື່ອນ ເຫັນເພື່ອນຄົບກັນ ຊ່ອຍກັນເຮັດກຸຕິມຸງຫຍ້າ ຢູ່ຈຳພັນສາທີ່ເນີນພູເຂົາອິສີຄິລິ ທ່ານພຣະທນິຍກຸມພກາຣບຸຕຣກໍເຮັດມຸງຫຍ້າຢູ່ຈຳພັນສາໃນທີ່ນັ້ນ ຕໍ່ເມື່ອລ່ວງໄຕຣມາສໄປແລ້ວ ພິກສຸເຫລົ່ານັ້ນຮື້ກຸຕິມຸງຫຍ້າ ເກັບຫຍ້າແລະທ່ອນໄມ້ໄວ້ແລ້ວພາກັນຫລີກຈາຣິກໄປໃນຊົນບົທ ສ່ວນພຣະ ທນິຍກຸມພກາຣບຸຕຣ ຍັງພັກຢູ່ທີ່ນັ້ນຕລອດຣະດູຝົນ ຣະດູໜາວແລະຣະດູຮ້ອນ ມື້ນຶ່ງເມື່ອທ່ານໄປບິນທບາຕໃນໝູ່ບ້ານ ຄົນຫາບຫຍ້າ ຄົນຫາຟືນ ຮື້ກຸຕິຫຍ້າຂອງທ່ານ ແລ້ວຂົນເອົາຫຍ້າແລະໄມ້ໄປ ທ່ານພຣະທນິຍກຸມພກາຣບຸຕຣໄດ້ຫາຫຍ້າແລະໄມ້ມາເຮັດກຸຕິຫຍ້າເປັນຄັ້ງທີ ໔ ແລະແມ່ນແຕ່ຄັ້ງທີ ໓ ເມື່ອທ່ານໄປບິນທບາຕໃນໝູ່ບ້ານ ຄົນຫາບຫຍ້າ ຄົນຫາຟືນ ກໍຍັງຮື້ເອົາກຸຕິຫຍ້າຂອງທ່ານ ແລ້ວຂົນຫຍ້າແລະໄມ້ໄປ ເປັນເຖິງ ໓ ຄັ້ງ ທ່ານຄິດວ່າ ເມື່ອເຮົາໄປບິນທບາຕໃນບ້ານ ຄົນຫາບຫຍ້າ ຄົນຫາຟືນ ຮື້ກຸຕິຫຍ້າແລ້ວຂົນຫຍ້າແລະໄມ້ໄປເຖິງ ໓ ຄັ້ງ ເຮົາມີກາຣ ສຶກສາດີ ບໍ່ບົກພ່ອງ ສຳເຣັຈສິລປະຊ່າງໝໍ້ ທຽບເທົ່າອາຈາຣຍ໌ ຢ່າກະນັ້ນເລີຍ ເຮົາເພິ່ງຄັ້ນຕົມເຮັດກຸຕິດິນລ້ວນດ້ວຍຕົວເອງ ດັ່ງນັ້ນ ທ່ານຈຶ່ງຄັ້ນຕົມກໍ່ກຸຕິດິນລ້ວນ ແລະຮວບຮວມຫຍ້າ ໄມ້ແລະຂີ້ງົວແຫ້ງມາສຸມໄຟເຜົາກຸຕິນັ້ນຈົນສຸກ ກຸຕິນັ້ນງົດງາມ ໜ້າເບິ່ງໜ້າຊົມ ມີສີແດງເໝືອນສີແມງຄ່ອມຄຳ (ເວລາລົມພັດ)ສົ່ງສຽງເໝືອນສຽງກະດິງ

[໗໕] ຕໍ່ມາ ພຣະຜູ້ມີພຣະພາຄສເດັຈລົງຈາກພູເຂົາຄິຊຢກູຕພ້ອມກັບພິກສຸຈຳນວນຫລາຍ ທອດພຣະເນຕຣເຫັນກຸຕິອັນງົດງາມໜ້າເບິ່ງໜ້າຊົມ ຕຣັສຖາມວ່າ "ພິກສຸທັງຫລາຍນັ້ນແມ່ນຫຍັງໜ້າເບິ່ງໜ້າຊົມ ສີເໝືອນແມງຄ່ອມຄຳ" ຄັນພິກສຸທັງຫລາຍຂາບທູລເຣື້ອງນັ້ນໃຫ້ຊົງຊາບແລ້ວ ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິວ່າ "ພິກສຸທັງຫລາຍ ກາຣກະທຳຂອງໂມຂບຸຣຸສນັ້ນບໍ່ສົມຄວຣ ບໍ່ຄ້ອຍຕາມ ບໍ່ເໝາະສົມ ບໍ່ແມ່ນກິຈຂອງສມນະ ໃຊ້ບໍ່ໄດ້ ບໍ່ຄວຣທຳເລີຍ ຈັ່ງໃດໂມຂບຸຣຸສຈຶ່ງຄັ້ນຕົມກໍ່ກຸຕິດິນລ້ວນລະ ໂມຂບຸຣຸສນັ້ນຊື່ວ່າບໍ່ໄດ້ມີຄວາມເອັນດູ ຄວາມອນຸເຄຣາະຫ໌ຄວາມບໍ່ບຽດບຽນສັຕວ໌ທັງຫລາຍ ພວກທ່ານຈົ່ງໄປທຳລາຍກຸຕິນັ້ນເສັຽ ຢ່າໃຫ້ເພື່ອນພຣົມຈາຣີໃນພາຍຫລັງໄດ້ບຽດບຽນໝູ່ສັຕວ໌ເລີຍ ພິກສຸທັງຫລາຍ ພິກສຸບໍ່ເພິ່ງເຮັດກຸຕິດິນລ້ວນ ພິກສຸໃດທຳຕ້ອງອາບັຕິທຸກກຕ" ພິກສຸເຫລົ່ານັ້ນຮັບພຣະພຸທທດີກາແລ້ວພາກັນໄປທີ່ກຸຕິ ຊ່ອຍກັນທຳລາຍກຸຕິນັ້ນ ໃນຂນະນັ້ນ ທ່ານພຣະທນິຍກຸມພກາຣບຸຕຣມາຖາມພິກສຸເຫລົ່ານັ້ນວ່າ "ເປັນຫຍັງພວກທ່ານຈຶ່ງທຳລາຍກຸຕິຂອງຜູ້ຂ້າ" "ທ່ານ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ທຳລາຍ" "ຖ້າພຣະຜູ້ມີພຣະພາຄຜູ້ເປັນທັມສາມີຮັບສັ່ງໃຫ້ທຳລາຍ ກໍທຳລາຍເຖີດ"

[໑໘໒] ຕໍ່ມາ ທ່ານພຣະທຸນິຍກຸມພກາຣບຸຕຣຄິດວ່າ ເມື່ອເຮົາໄປບິນທຸບາຕໃນໝູ່ບ້ານ ຄົນຫາບຫຍ້າ ຄົນຫາຟືນມາຮື້ກຸຕິຫຍ້າ ຂົນຫຍ້າແລະທ່ອນໄມ້ໄປເຖິງ ໓ ຄັ້ງ ແມ່ນແຕ່ກຸຕິດິນລ້ອນທີ່ທຳໄວ້ພຣະຜູ້ມີພຣະພາຄກໍຮັບສັ່ງໃຫ້ທຳລາຍ ເຮົາຮູ້ຈັກພນັກງານປ່າໄມ້ທີ່ຮັກແພງກັນ ຢ່າກະນັ້ນເລີຍເຮົາຄວຣຂໍໄມ້ມາເຮັດກຸຕິໄມ້ ແລ້ວໄປຫາເຈົ້າພນັກງານປ່າໄມ້ ກ່າວວ່າ "ຈະເຣີນພອນ ເມື່ອອາຕມາໄປບິນທຸບາຕໃນໝູ່ບ້ານ ຄົນຫາບຫຍ້າ ຄົນຫາຟືນໄປຮື້ກຸຕິຫຍ້າ ຂົນຫຍ້າແລະໄມ້ໄປເຖິງ ໓ ຄັ້ງ ແມ່ນກຸຕິດິນລ້ອນທີ່ທຳໄວ້ ພຣະຜູ້ມີພຣະພາຄກໍຮັບສັ່ງໃຫ້ທຳລາຍ ທ່ານຈົ່ງໃຫ້ໄມ້ແກ່ອາຕມາ ອາຕມາຕ້ອງການຈະເຮັດກຸຕິໄມ້" ເຈົ້າພນັກງານປ່າໄມ້ຕອບວ່າ "ຜູ້ຂ້າບໍ່ມີໄມ້ຈະຖວາຍພຣະຄຸນເຈົ້າໄດ້ຂນ້ອຍ ຈະມີກໍແຕ່ໄມ້ຂອງຫລວງທີ່ເກັບໄວ້ສ້ອມແປງເມືອງໃນຄາວຈຳເປັນ ຖ້າພຣະເຈົ້າແຜ່ນດິນມີຮັບສັ່ງໃຫ້ພຣະຣາຊທານ ພຣະຄຸນເຈົ້າກໍໃຫ້ຄົນໄປຂົນເອົາເຖີດ" ທ່ານພຣະທຸນິຍກຸມພກາຣບຸຕຣກ່າວວ່າ "ຈະເຣີນພອນ ພຣະເຈົ້າແຜ່ນດິນໄດ້ພຣະຣາຊທານໄມ້ນັ້ນແລ້ວ" ລຳດັບນັ້ນ ເຈົ້າພນັກງານປ່າໄມ້ຄິດວ່າ "ພຣະສມນະເຊື້ອສາຍພຣະສາກຍບຸຕຣເຫລົ່ານີ້ປະພຶດທັມປະພຶດສງົບ ປະພຶດພຣົມຈັນຍ໌ ເວົ້າແມ່ນແທ້ມີສີລ ມີກັລຍານທັມ ແມ່ນແຕ່ພຣະເຈົ້າແຜ່ນດິນຍັງຊົງເຫລື້ອມໃສມາກ ພຣະທຸນິຍະຄົງບໍ່ກລ້າເວົ້າສິ່ງທີ່ພຣະເຈົ້າແຜ່ນດິນຍັງບໍ່ໄດ້ພຣະຣາຊທານວ່າ ໄດ້ພຣະຣາຊທານແລ້ວ" ລຳດັບນັ້ນ ເຈົ້າພນັກງານປ່າໄມ້ຈຶ່ງກ່າວກັບທ່ານພຣະທຸນິຍະດັ່ງນີ້ວ່າ "ນິມົນຕ໌ທ່ານໃຫ້ຄົນຂົນໄປເຖີດ ຂນ້ອຍ" ທ່ານພຣະທຸນິຍະສັ່ງໃຫ້ຕັດໄມ້ເຫລົ່ານັ້ນເປັນທ່ອນນ້ອຍທ່ອນໃຫຍ່ບັນທຸກກວຽນໄປເຮັດກຸຕິໄມ້

## ວັສສກາຣພຣາມນ໌ຕຣວຈຣາຊກາຣ

[໑໘໓] ເວລານັ້ນ ວັສສກາຣພຣາມນ໌ມຫາອມາຕຍ໌ມຄທຣັຖ ໄປຕຣວຈຣາຊກາຣ ເຂົ້າໄປຫາເຈົ້າພນັກງານປ່າໄມ້ເຖິງທີ່ພັກ ຄັນເຖິງແລ້ວໄດ້ກ່າວກັບເຈົ້າພນັກງານປ່າໄມ້ດັ່ງນີ້ວ່າ "ນີ້ທ່ານ ໄມ້ຂອງຫລວງທີ່ເກັບໄວ້ສ້ອມແປງເມືອງໃນຄາວຈຳເປັນຢູ່ທີ່ໃດ" ເຈົ້າໜ້າທີ່ປ່າໄມ້ຕອບວ່າ "ຂ້າແຕ່ທ່ານພຣະເຈົ້າແຜ່ນດິນໄດ້ພຣະຣາຊ ທານ ໄມ້ແກ່ພຣະທຸນິຍກຸມພກາຣບຸຕຣໄປແລ້ວ" ວັສສກາຣພຣາມນ໌ບໍ່ພໍໃຈ ກ່າວວ່າ "ເປັນຫຍັງພຣະເຈົ້າແຜ່ນດິນຈຶ່ງໄດ້ພຣະຣາຊທານໄມ້ຂອງຫລວງທີ່ເກັບໄວ້ສ້ອມແປງເມືອງໃນຄາວຈຳເປັນແກ່ພຣະທຸນິຍກຸມພກາຣບຸຕຣໄປລະ" ຈຶ່ງເຂົ້າໄປເຝົ້າພຣະເຈົ້າພິມພິສາຣຈອມທັພມຄທ ເຖິງທີ່ປະທັບ ຄັນເຖິງແລ້ວໄດ້ຂາບທູລພຣະເຈົ້າພິມພິສາຣຈອມທັພມຄທ

ດັ່ງນີ້ວ່າ "ໄດ້ຊາບກະມ່ອມວ່າ ພຣະອົງຄ໌ໄດ້ພຣະຣາຊທານໄມ້ຂອງຫລວງ ທີ່ເກັບໄວ້ສ້ອມແປງ ເມືອງໃນຄາວຈຳເປັນແກ່ພຣະທນິຍກຸມພການບຸຕຣໄປແລ້ວ ແມ່ນແທ້ບໍພຣະພຸທທເຈົ້າຂ້າ"

"ໃຜກ່າວຢ່າງນັ້ນ"

"ເຈົ້າຫນ້າທີ່ປ່າໄມ້ ພຣະພຸທທເຈົ້າຂ້າ"

"ຖ້າເຊັ່ນນີ້ ຈົ່ງໄປຮຽກເຈົ້າຫນ້າທີ່ປ່າໄມ້ມາ"

ວັສສການພຣາມນ໌ສັ່ງໃຫ້ເຈົ້າຫນ້າທີ່ຄຸມຕົວເຈົ້າຫນ້າທີ່ປ່າໄມ້ມາທັນທີ ພຣະທນິຍພຸມພການບຸຕຣ ເຫັນເຈົ້າຫນ້າ ທີ່ປ່າໄມ້ຖືກຄອບຄຸມຕົວໄປຈຶ່ງກ່າວວ່າ "ຈະເຣີນພອນ ທ່ານຖືກເຈົ້າຫນ້າທີ່ຄອບຄຸມ ຕົວດ້ວຍເຣື່ອງຫຍັງ"

"ເຣື່ອງໄມ້ນັ້ນແຫລະ ຂນ້ອຍ"

"ທ່ານຈົ່ງໄປກ່ອນເຖີດ ອາຕມາຈະຕາມໄປ" ເຈົ້າຫນ້າທີ່ປ່າໄມ້ກ່າວວ່າ

"ພຣະຄຸນເຈົ້າຄວຣໄປກ່ອນທີ່ຜູ້ຂ້າຈະເດືອດຮ້ອນເດີ້ ຂນ້ອຍ"

[໗໗] ພຣະທນິຍກຸມພການບຸຕຣ ເຂົ້າໄປພຣະຣາຊນິເວສນ໌ຂອງພຣະເຈົ້າພິມພິສານ ແລ້ວນັ່ງເທິງ ອາສນະ ຂນະນັ້ນ ພຣະເຈົ້າພິມພິສານສເດັຈເຂົ້າໄປຫາພຣະທນິຍກຸມພການບຸຕຣ ຊົງໄຫວ້ແລ້ວປະ ທັບນັ່ງ ນະ ທີ່ສົມ ຄວຣ ຕຣັສຖາມວ່າ "ພຣະຄຸນເຈົ້າ ຊາບວ່າໄມ້ຂອງຫລວງທີ່ເກັບໄວ້ສ້ອມແປງ ເມືອງໃນຄາວຈຳເປັນ ໂຍມຖວາຍແກ່ພຣະຄຸນເຈົ້າ ແມ່ນແທ້ບໍ" "ແມ່ນແທ້ມຫາບພິຕຣ" "ພຣະຄຸນ ເຈົ້າ ໂຍມເປັນພຣະເຈົ້າແຜ່ນດິນ ມີກໍຣະນີຍກິຈມາກມາຍ ເຖິງຈະຖວາຍໄປແລ້ວກໍຈຳບໍ່ໄດ້ ພຣະຄຸນ ເຈົ້າໂປດເຕືອນຄວາມຈຳໃຫ້ໂຍມດ້ວຍ" ພຣະທນິຍກຸມພການບຸຕຣ ທູລວ່າ "ຂໍຖວາຍພຣະພອນ ພຣະອົງຄ໌ຈຳໄດ້ບໍ່ ຄັ້ງທີ່ພຣະອົງຄ໌ສເດັຈຖເລີງຖວັລຍຣາຊຍ໌ໃຫມ່ໆ ຊົງເປັ່ງພຣະອາຈາວ່າ ຂ້າ ພະເຈົ້າຖວາຍຫຍ້າ ໄມ້ແລະນ້ຳແກ່ສມນະພຣາມນ໌ ຂໍສມນະພຣາມນ໌ໂປດໃຊ້ສອຍເຖີດ" "ພຣະຄຸນ ເຈົ້າ ໂຍມຈຳໄດ້ ທີ່ໂຍມເວົ້ານັ້ນຫມາຍເຖິງສມນະພຣາມນ໌ຜູ້ມີຄວາມລະອາຍ ມີຄວາມຣະມັດ ຣະວັງ ໃຝ່ການສຶກສາ ມີຄວາມກຽດຊັງແມ່ນແຕ່ໂທສເລັກໆນ້ອຍໆ ຫຍ້າ ໄມ້ແລະນ້ຳນັ້ນ ຍັງບໍ່ໄດ້ມີໃຜ ຈັບຈອງ ຢູ່ໃນປ່າ ທ່ານຈົງໃຈອ້າງຈະຂົນໄມ້ທີ່ບໍ່ໃຫ້ໄປ ພຣະເຈົ້າແຜ່ນດິນເຊັ່ນໂຍມຈະຂ້າ ຂ້າ ຈອງຈຳ ຫລືເນຣເທສສມນະພຣາມນ໌ຢ່າງໃດໄດ້ ນິມົນຕ໌ກັບໄປເຖີດ ທ່ານລອດຕົວໄດ້ເພາະຂົນ (ເຄື່ອງນຸ່ງຂອງສມນະ) ແຕ່ຢ່າໄດ້ເຮັດຢ່າງນີ້ອີກ"

ປະຊາຊົນຕຳຫນິ

ປະຊາຊົນພາກັນຕຳໜິ ປະນາມ ໂພນທະນາວ່າ "ພຣະສມນະເຊື້ອສາຍສາກຍບຸຕຣເຫລົ່ານີ້ບໍ່ມີຄວາມລະອາຍ ທຸສີລ ຊອບເວົ້າເທັຈ ແຕ່ກໍປະຕິຍານວ່າ ປະພຶດທັມ ປະພຶດສງົບ ປະພຶດພຣົມຈັນຍ໌ ເວົ້າແມ່ນແທ້ມີສີລ ມີກັລຍານທັມ ພວກທ່ານບໍ່ມີຄວາມເປັນສມນະ ບໍ່ມີຄວາມເປັນພຣາມນ໌ ຄວາມເປັນສມນະ ຄວາມເປັນ ພຣາມນ໌ຂອງພວກທ່ານເສື່ອມສິ້ນໄປແລ້ວ ພວກທ່ານຈະເປັນສມນະເປັນພຣາມນ໌ໄດ້ຢ່າງໃດ ພວກທ່ານປາສຈາກຄວາມເປັນສມນະ ປາສຈາກຄວາມເປັນພຣາມນ໌ ແມ່ນແຕ່ພຣະເຈົ້າແຜ່ນດິນກໍຍັງຖືກສມນະເຫລົ່ານັ້ນ ຫລອກລວງໄດ້ ຈັ່ງໃດຄົນອື່ນຈັກບໍ່ຖືກຫລອກລວງລະ"

ພິກສຸທັງຫລາຍໄດ້ຍິນປະຊາຊົນຕຳໜິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍສັນໂດສ ມີຄວາມລະອາຍ ມີຄວາມຣະມັດຣະວັງ ໃຝ່ກາຣສຶກສາ ຈຶ່ງຕຳໜິ ປະນາມໂພນທະນາວ່າ "ຈັ່ງໃດທ່ານພຣະ ທນິຍກຸມພກາຣບຸຕຣຈຶ່ງລັກໄມ້ຂອງຫລວງທີ່ເຂົາບໍ່ໄດ້ໃຫ້ໄປລະ" ຄັນພິກສຸທັງຫລາຍຕຳໜິທ່ານພຣະ ທນິຍກຸມພກາຣບຸຕຣໂດຍປະກາຣຕ່າງໆ ແລ້ວຈຶ່ງນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຊ໌ບັນຍັຕສິກຂາບົທ

ຄັ້ງນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຊ໌ເພາະເອື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະທນິຍກຸມພກາຣບຸຕຣວ່າ "ທນິຍະ ຊາບວ່າທ່ານລັກໄມ້ຫລວງແມ່ນແທ້ບໍ່" ທ່ານທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄຊົງຕຳໜິວ່າ "ໂມຂບຸຣຸສ ກາຣກະທຳຢ່າງນີ້ບໍ່ສົມຄວຣ ບໍ່ຄ້ອຍຕາມ ບໍ່ເໝາະສົມ ບໍ່ແມ່ນກິຈຂອງສມນະ ໃຊ້ບໍ່ໄດ້ ບໍ່ຄວຣທຳ ໂມຂບຸຣຸສກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສ ໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ທີ່ແມ່ນແທ້ກັບຈະເຮັດໃຫ້ຄົນທີ່ບໍ່ເຫລື້ອມໃສກໍບໍ່ເຫລື້ອມໃສໄປເລີຍ ຄົນທີ່ເຫລື້ອມໃສແລ້ວບາງພວກກໍຈະກາຍເປັນອື່ນໄປ"

ສມັຍນັ້ນ ມີມຫາອມາຕຍ໌ເຄີຍເປັນຜູ້ພິພາກສາຄົນນຶ່ງບວຊຢູ່ໃນໝູ່ພິກສຸ ນັ່ງຢູ່ບໍ່ໄກພຣະຜູ້ມີພຣະພາຄ ພຣະ ອົງຄ໌ຈຶ່ງຮັບສັ່ງຖາມພິກສຸຮູບນັ້ນວ່າ "ພຣະເຈົ້າພິມພິສາຣ ຈອມທັພມຄທ ຈັບໂຈຣໄດ້ແລ້ວປະຫາຣແດ່ ຈອງຈຳແດ່ ເນຣເທສແດ່ ດ້ວຍອັຕຣາໂທສຕາມມູລຄ່າຊັພຍ໌ທີ່ໂຈຣກັມມາເທົ່າໃດ" ພິກສຸຮູບນັ້ນຂາບທູລວ່າ "ດ້ວຍມູລຄ່າ ໑ ບາທແດ່ ຄວຣແກ່ ໑ ບາທແດ່ ເກີນກວ່າ ໑ ບາທແດ່ ພຣະພຸທທເຈົ້າຂ້າ"

(ສມັຍນັ້ນ ໃນກຸງຣາຊຄຶຫ໌ ຊັພຍ໌ ໑ ບາທ ເທົ່າກັບ ໕ ມາສກ)

ພຣະຜູ້ມີພຣະພາຄຊົງຕຳຫນິທ່ານພຣະທນິຍກຸມພກາຣບຸຕຣ ໂດຍປະການຕ່າງໆ ແລ້ວໄດ້ຕຣັສໂທສແຫ່ງຄວາມເປັນຄົນລ້ຽງຍາກ ຯລຯ ຄຸນແຫ່ງການປາຣົພຄວາມພຽນ ແລ້ວຊົງສະແດງທັມມີກຖາແກ່ພິກສຸທັງຫລາຍໃຫ້ເຫມາະສົມກັບເຣື່ອງນັ້ນ ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັຕ

[໗໘] ກ໋ ພິກສຸໃດ ຖືເອົາຊັພຍ໌ທີ່ເຈົ້າຂອງບໍ່ໄດ້ໃຫ້ໂດຍສ່ວນແຫ່ງຈິຕຄິດຈະລັກ ມີມູລຄ່າເທົ່າກັບອັຕຣາໂທສທີ່ພຣະຣາຊາທັງຫລາຍຈັບໂຈຣໄດ້ແລ້ວປະຫາຣແດ່ ຈອງຈຳແດ່ ເນຣເທສແດ່ ບໍຣິພາສວ່າ "ເຈົ້າເປັນໂຈຣ ເຈົ້າເປັນຄົນພາລ ເຈົ້າເປັນຄົນຫລົງ ເຈົ້າເປັນຄົນລັກ" ດັ່ງນີ້ ເພາະຖືເອົາຊັພຍ໌ທີ່ເຈົ້າຂອງບໍ່ໄດ້ໃຫ້ເຊັ່ນໃດ ພິກສຸຜູ້ຖືເອົາຊັພຍ໌ທີ່ເຈົ້າຂອງບໍ່ໄດ້ໃຫ້ເຊັ່ນນັ້ນ ແມ່ນວ່າພິກສຸນີ້ເປັນປາຣາຊິກ ຫາສັງວາສບໍ່ໄດ້ ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັຕໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື່ອງພຣະທນິຍກຸມພກາຣບຸຕຣ ຈົບ

ເຣື່ອງພວກພິກສຸສັພພັຄຄີຍ໌

[໘໐] ຄັນຕໍ່ມາ ພວກພິກສຸສັພພັຄຄີຍ໌ໄປລານຕາກຜ້າຂອງຊ່າງຍ້ອມຜ້າ ແລ້ວພາກັນລັກຫໍ່ຜ້າກັບມາອັດ ແບ່ງກັນ ພິກສຸທັງຫລາຍກ່າວຢ່າງນີ້ວ່າ "ພວກທ່ານມີບຸນມາກ ຈີວອນຈຶ່ງເກີດຂຶ້ນແກ່ພວກທ່ານມາກ" ພວກພິກສຸສັພພັຄຄີຍ໌ ຕອບວ່າ "ພວກເຮົາຈະມີບຸນມາຈາກໃດກັນ ພວກເຮົາໄປລານຕາກຜ້າຂອງຊ່າງຍ້ອມແລ້ວ ໄດ້ລັກຫໍ່ຜ້າຂອງຊ່າງຍ້ອມມາດຽວນີ້ເອງ" ພິກສຸທັງຫລາຍຈຶ່ງທ້ວງຕິງວ່າ "ທ່ານ ພຣະຜູ້ມີພຣະພາຄໄດ້ຊົງບັນຍັຕສິກຂາບົທໄວ້ແລ້ວບໍ່ແມ່ນບໍ ເຫຕຸໃດ ພວກທ່ານຈຶ່ງລັກຫໍ່ຜ້າຂອງຊ່າງຍ້ອມມາລະ" ພວກພິກສຸສັພພັຄຄີຍ໌ກ່າວ ແຍ້ງວ່າ "ແມ່ນແທ້ທ່ານທັງຫລາຍພຣະຜູ້ມີພຣະພາຄໄດ້ຊົງບັນຍັຕສິກຂາບົທໄວ້ແລ້ວ ແຕ່ສິກຂາບົທນັ້ນໃຊ້ສະເພາະໃນບ້ານ ບໍ່ແມ່ນໃນປ່າ" ພິກສຸເຫລົ່ານັ້ນກ່າວວ່າ "ພຣະບັນຍັຕນັ້ນໃຊ້ໄດ້ເຫມືອນກັນທັງໃນບ້ານແລະໃນປ່າບໍ່ແມ່ນບໍການກະທຳຂອງທ່ານບໍ່ສົມຄວຣ ບໍ່ຄ້ອຍຕາມ ບໍ່ເຫມາະສົມ ບໍ່ແມ່ນກິຈຂອງສມນະ ໃຊ້ບໍ່ໄດ້ ບໍ່ຄວຣທຳເລີຍ ຈັ່ງໃດ ພວກທ່ານຈຶ່ງລັກຫໍ່ຜ້າຂອງຊ່າງຍ້ອມມາລະ ການກະທຳຢ່າງນີ້ ບໍ່ໄດ້ເຮັດ

ໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ທີ່ແມ່ນແທ້ມັນກັບຈະເຮັດໃຫ້ຄົນທີ່ບໍ່ເຫລື້ອມໃສກໍບໍ່ເຫລື້ອມໃສໄປເລີຍ ຄົນທີ່ເຫລື້ອມໃສຢູ່ແລ້ວບາງພວກກໍຈະກາຍເປັນອື່ນໄປ”

ຄັນພິກສຸເຫລົ່ານັ້ນຕໍາໜິພວກພິກສຸສັພພັຄຄີຍ໌ໂດຍປະການຕ່າງໆ ແລ້ວຈຶ່ງນໍາເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ລໍາດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ “ພິກສຸທັງຫລາຍ ຊາບວ່າ ພວກທ່ານລັກຫົ່ມຜ້າຂອງຊ່າງຍ້ອມ ແມ່ນແທ້ບໍ” ພວກພິກສຸສັພພັຄຄີຍ໌ທູລຮັບວ່າ “ແມ່ນແທ້ພຣະພຸທທເຈົ້າຂ້າ” ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕໍາໜິວ່າ “ໂມຂບຸຣຸສທັງຫລາຍ ການກະທໍາຂອງພວກທ່ານບໍ່ສົມຄວຣ ຯລຯ ບໍ່ຄວຣທໍາເລີຍ ໂມຂບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງລັກຫົ່ມຜ້າຂອງຊ່າງຍ້ອມມາລະ ໂມຂບຸຣຸສທັງຫລາຍ ການກະທໍາຢ່າງນີ້ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ”

ຄັນຕໍາໜິພວກພິກສຸສັພພັຄຄີຍ໌ໂດຍປະການຕ່າງໆ ແລ້ວຈຶ່ງຕຣັສໂທສແຫ່ງຄວາມເປັນຜູ້ລ້ຽງຍາກ ຯລຯ ຄຸນແຫ່ງການປາຣົພຄວາມພຽນ ແລ້ວຊົງສະແດງທັມມີກຖາແກ່ພິກສຸທັງຫລາຍໃຫ້ເໝາະສົມກັບເຣື້ອງນັ້ນແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

## ພຣະອນຸບັນຍັຕ

[໕໑] ອີກຢ່າງນຶ່ງ ພິກສຸໃດຖືເອົາຊັພຍ໌ທີ່ເຈົ້າຂອງບໍ່ໄດ້ໃຫ້ໂດຍສ່ວນແຫ່ງຈິຕຄິດຈະລັກ ຈາກໝູ່ບ້ານກໍຕາມ ຈາກປ່າກໍຕາມ ມີມູລຄ່າເທົ່າກັບອັຕຣາໂທສທີ່ພຣະຣາຊາທັງຫລາຍຈັບໂຈຣໄດ້ແລ້ວ ປະຫາຣແດ່ ຈອງຈໍາແດ່ ເນຣເທສແດ່ ບໍຣິພາສວ່າ “ເຈົ້າເປັນໂຈຣ ເຈົ້າເປັນຄົນພາລ ເຈົ້າເປັນຄົນຫລົງ ເຈົ້າເປັນຄົນລັກ” ດັ່ງນີ້ ເພາະ ຖືເອົາຊັພຍ໌ທີ່ເຈົ້າຂອງບໍ່ໄດ້ໃຫ້ເຊັ່ນໃດ ພິກສຸຜູ້ຖືເອົາຊັພຍ໌ທີ່ເຈົ້າຂອງບໍ່ໄດ້ໃຫ້ເຊັ່ນນັ້ນ ແມ່ນວ່າພິກສຸນີ້ ກໍເປັນປາຣາຊິກ ຫາສັງວາສບໍ່ໄດ້

## ເຣື້ອງພວກພິກສຸສັພພັຄຄີຍ໌ ຈົບ

## ສິກຂາບົທວິພັງຄ໌

[໕໔] ຄໍາວ່າ ອີກຜູ້ນຶ່ງ... ຜູ້ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ອີກຜູ້ນຶ່ງ... ຜູ້ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າ ພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາ
ວ່າ ພິກສຸ ໃນຄວາມໝາຍນີ້

ທີ່ຊື່ວ່າ ໝູ່ບ້ານ ໄດ້ແກ່ ໝູ່ບ້ານມີກະຕູບ ໑ ຫລັງແດ່ ໝູ່ບ້ານມີກະຕູບ ໔ ຫລັງແດ່ ໝູ່ບ້ານ
ມີກະຕູບ ໓ ຫລັງແດ່ ໝູ່ບ້ານມີກະຕູບ ໔ ຫລັງແດ່ ໝູ່ບ້ານມີຄົນຢູ່ແດ່ ໝູ່ບ້ານບໍ່ມີຄົນຢູ່ແດ່
ໝູ່ບ້ານທີ່ມີຮົ້ວລ້ອມແດ່ ໝູ່ບ້ານບໍ່ມີຮົ້ວລ້ອມແດ່ ໝູ່ບ້ານທີ່ມີໂຮງເຮືອນຄືໂຮງພັກງົວຄວາຍແດ່
ແມ່ນວ່າສຖານທີ່ທີ່ມີໝູ່ກວຽນຫລື ງົວຄວາຍພັກແຮມເກີນກວ່າ ໔ ເດືອນ ກໍຕຣັສຮຽກວ່າ ເປັນ
ໝູ່ບ້ານ

ທີ່ຊື່ວ່າ ອຸປຈາຣໝູ່ບ້ານ ໄດ້ແກ່ ເຂຕທີ່ຊາຍມີກຳລັງປານກາງຢືນຢູ່ທີ່ເສົາເຂື່ອນຂອງໝູ່ບ້ານທີ່ມີ
ຮົ້ວລ້ອມ ດີກກ້ອນດິນໄປຕົກລົງ ຫລື ເຂຕທີ່ຊາຍມີກຳລັງປານກາງຢືນຢູ່ທີ່ອຸປຈາຣເຮືອນຂອງ
ໝູ່ບ້ານທີ່ບໍ່ມີຮົ້ວລ້ອມ ດີກກ້ອນດິນໄປຕົກລົງ

ທີ່ຊື່ວ່າ ປ່າ ໄດ້ແກ່ ສຖານທີ່ທີ່ເວັ້ນຈາກໝູ່ບ້ານແລະອຸປຈາຣໝູ່ບ້ານ ນອກນັ້ນຊື່ວ່າ ປ່າ

ທີ່ຊື່ວ່າ ຊັພຍ໌ທີ່ເຈົ້າຂອງບໍ່ໄດ້ໃຫ້ ໄດ້ແກ່ ຊັພຍ໌ທີ່ເຈົ້າຂອງບໍ່ໃຫ້ ບໍ່ສລະ ບໍ່ບຣິຈາຄ ຍັງຮັກສາຄຸ້ມ
ຄອງຢູ່ ຖືກັມສິທທິ໌ຢູ່ ເປັນຊັພຍ໌ທີ່ຄົນອື່ນຫວງແຫນ ນັ້ນຊື່ວ່າຊັພຍ໌ທີ່ເຈົ້າຂອງບໍ່ໄດ້ໃຫ້

ຄຳວ່າ ໂດຍສ່ວນແຫ່ງຈິຕຄິດຈະລັກ ຄື ມີໄຖຍຈິຕ ໄດ້ແກ່ ຄິດຈະລັກ

ຄຳວ່າ ຖືເອົາ ໄດ້ແກ່ ຕູ່ ຊິງ ສໍ້ໂກງ ເຄື່ອນໄຫວອິຣິຍາບົຖ ເຮັດໃຫ້ຊັພຍ໌ເຄື່ອນທີ່ ໃຫ້ລ່ວງ
ເຂຕທີ່ໝາຍ

ທີ່ຊື່ວ່າ ເຊັ່ນໃດ ຄື ໑ ບາທແດ່ ຄວຣແກ່ ໑ ບາທແດ່ ເກີນກວ່າ ໑ ບາທແດ່

ທີ່ຊື່ວ່າ ພຣະຣາຊາທັງຫລາຍ ໄດ້ແກ່ ພຣະເຈົ້າແຜ່ນດິນ ເຈົ້າຜູ້ປົກຄອງປຣະເທສ ທ່ານຜູ້ປົກ
ຄອງມົນທົລ ທ່ານຜູ້ປົກຄອງໝູ່ບ້ານທີ່ຢູ່ໃນຣະຫວ່າງ ທ່ານຜູ້ຕັດສິນຄະດີ ມຫາອມາຕຍ໌ ຫລືເຈົ້າ
ໜ້າທີ່ທີ່ມີອຳນາຈສັ່ງປະຫາຣແລະຈອງຈຳໄດ້ ທ່ານເຫລົ່ານີ້ຊື່ວ່າ ພຣະຣາຊາທັງຫລາຍ

ທີ່ຊື່ວ່າ ໂຈຣ ໄດ້ແກ່ ຜູ້ທີ່ລັກຊັພຍ໌ທີ່ເຈົ້າຂອງບໍ່ໄດ້ໃຫ້ມີຣາຄາ ໕ ມາສກ(ມາສະກະ)ແດ່ ເກີນກວ່າ
໕ ມາສກແດ່ ໂດຍສ່ວນແຫ່ງຈິຕຄິດຈະລັກ ນີ້ຊື່ວ່າ ໂຈຣ

ຄຳວ່າ ປະຫາຣແດ່ ໄດ້ແກ່ ປະຫາຣດ້ວຍມືແດ່ ດ້ວຍຕີນແດ່ ດ້ວຍແສ້ແດ່ ດ້ວຍຫວາຍແດ່ ດ້ວຍ
ກະບອງແດ່ ດ້ວຍການຕັດແດ່

ຄຳວ່າ ຈອງຈຳແດ່ ໄດ້ແກ່ ຈອງຈຳດ້ວຍເຄື່ອງຈອງຈຳຄືເຊືອກແດ່ ຂື່ຄາແດ່ ໂສ້ລ່າມແດ່ ດ້ວຍ
ການກັກຂັງໃນເຮືອນຈຳແດ່ ກັກບໍຣິເວນໃນເມືອງແດ່ ໃນໝູ່ບ້ານແດ່ ໃນຕາແສງແດ່ ໃຫ້ຄົນ
ເຝົ້າຄອຍຄວບຄຸມແດ່ຄຳວ່າ ເນຣເທສແດ່ ໄດ້ແກ່ ຂັບໄລ່ອອກໄປຈາກໝູ່ບ້ານແດ່ ຈາກຕາແສງ

ແດ່ ຈາກເມືອງແດ່ ຈາກຊົນບົທແດ່ ຈາກປຣະເທສແດ່
ຄຳວ່າ ເຈົ້າເປັນໂຈຣ ເຈົ້າເປັນຄົນພາລ ເຈົ້າເປັນຄົນຫລົງ ເຈົ້າເປັນຄົນລັກ ນີ້ເປັນຄຳບໍຣິພາສ
ທີ່ຊື່ວ່າ ເຊັ່ນນັ້ນ ຄື ໑ ບາທແດ່ ຄວຣແກ່ ໑ ບາທແດ່ ເກີນກວ່າ ໑ ບາທແດ່
ຄຳວ່າ ຜູ້ຖືເອົາ ໄດ້ແກ່ ຜູ້ຕູ່ ຊິງ ສໍ້ໂກງ ເຄື່ອນໄຫວອິຣິຍາບົຖ ເຮັດໃຫ້ຊັພຍ໌ເຄື່ອນທີ່ ໃຫ້ລ່ວງ
ເຂຕທີ່ໝາຍ
ຄຳວ່າ ແມ່ນວ່າພິກສຸນີ້ ພຣະຜູ້ມີພຣະພາຄຕຣັສໝາຍເຖິງພິກສຸຮູບກ່ອນ
ຄຳວ່າ ເປັນປາຣາຊິກ ອທິບາຍວ່າ ພິກສຸຖືເອົາຊັພຍ໌ທີ່ເຈົ້າຂອງບໍ່ໄດ້ໃຫ້ ໑ ບາທແດ່ ຄວຣແກ່ ໑ ບາທແດ່ ເກີນກວ່າ ໑ ບາທແດ່ ໂດຍສ່ວນແຫ່ງຈິຕຄິດຈະລັກ ຍ່ອມບໍ່ເປັນສມນະ ບໍ່ເປັນເຊື້ອສາຍສາກຍບຸຕຣ ປຽບເໝືອນໃບໄມ້ແຫ້ວຫ່ຽວເຫລືອງຫລຸດຈາກຂົ້ວນແລ້ວ ບໍ່ອາຈເປັນຂອງຂຽວສົດຕໍ່ໄປໄດ້ ດ້ວຍເຫຕຸນັ້ນ ພຣະຜູ້ມີພຣະພາຄຈຶ່ງຕຣັສຮຽກວ່າ ເປັນປາຣາຊິກ
ຄຳວ່າ ຫາສັງວາສບໍ່ໄດ້ ອທິບາຍວ່າ ທີ່ຊື່ວ່າ ສັງວາສ ໄດ້ແກ່ ກັມທີ່ທຳຮ່ວມກັນ ອຸທເທສທີ່ສວດຮ່ວມກັນ ຄວາມມີສິກຂາສເມີກັນ ນີ້ຊື່ວ່າ ສັງວາສ ສັງວາສນັ້ນບໍ່ມີກັບພິກສຸຮູບນັ້ນ ດ້ວຍເຫຕຸນັ້ນ ພຣະຜູ້ມີພຣະພາຄຈຶ່ງຕຣັສວ່າ ຫາສັງວາສບໍ່ໄດ້

ບົທພາຊນີຍ໌

ມາຕິກາ

[໙໖] ຊັພຍ໌ທີ່ຢູ່ໃນແຜ່ນດິນ ຊັພຍ໌ທີ່ຢູ່ເທິງບົກ ຊັພຍ໌ທີ່ຢູ່ໃນອາກາສ ຊັພຍ໌ທີ່ຢູ່ໃນທີ່ແຈ້ງ ຊັພຍ໌ທີ່ຢູ່ໃນນ້ຳ ຊັພຍ໌ທີ່ຢູ່ໃນເຮືອ ຊັພຍ໌ທີ່ຢູ່ໃນຍານ ຊັພຍ໌ທີ່ນຳຕິດຕົວໄປໄດ້ ຊັພຍ໌ທີ່ຢູ່ໃນສວນ ຊັພຍ໌ທີ່ຢູ່ໃນວັດ ຊັພຍ໌ທີ່ຢູ່ໃນນາ ຊັພຍ໌ທີ່ຢູ່ໃນພື້ນທີ່ ຊັພຍ໌ທີ່ຢູ່ໃນໝູ່ບ້ານ ຊັພຍ໌ທີ່ຢູ່ໃນປ່າ ນ້ຳ ໄມ້ຊຳຣະແຂ້ວ ຕົ້ນໄມ້ເຈົ້າປ່າ ຊັພຍ໌ທີ່ມີຜູ້ນຳໄປ ຊັພຍ໌ທີ່ເຂົາຝາກໄວ້ ດ່ານພາສີ ສັຕວ໌ມີຊີວິຕ ສັຕວ໌ບໍ່ມີຕີນ ສັຕວ໌ ໒ ຕີນ ສັຕວ໌ ໔ ຕີນ ສັຕວ໌ມີຕີນຫລາຍ ພິກສຸຜູ້ສັ່ງ ພິກສຸຜູ້ຮັບຂອງຝາກ ການຊັກຊວນກັນໄປລັກ ການນັດໝາຍ ການທຳນິມິຕ

[໗໔] ທີ່ຊື່ວ່າ ຊັພຍ໌ທີ່ຢູ່ໃນແຜ່ນດິນ ໄດ້ແກ່ ຊັພຍ໌ທີ່ຝັງຖິ້ມໄວ້ໃນແຜ່ນດິນ ພິກສຸມີໄຖຍຈິຕຄິດ ຈະລັກຊັພຍ໌ທີ່ຢູ່ໃນແຜ່ນດິນ ແລ້ວຫາເພື່ອນໄປດ້ວຍ ຫາຈົກ ຫາກະຕ່າ ຫລືໄປແຕ່ຜູ້ດຽວ ຕ້ອງ ອາບັຕິທຸກກຕ ຕັດໄມ້ ຫລືເຄືອໄມ້ທີ່ຂຶ້ນຢູ່ທີ່ນັ້ນ ຕ້ອງອາບັຕິທຸກກຕ ຂຸດກົ່ນຫລືກອບໂກຍຮ່ອນ ດິນ ຕ້ອງອາບັຕິທຸກກຕ ຈັບຕ້ອງຫມໍ້ຊັພຍ໌ ຕ້ອງອາບັຕິທຸກກຕ ເຮັດໃຫ້ໄຫວ ຕ້ອງອາບັຕິ ຖຸລລັຈຈັຍ ເຮັດໃຫ້ເຄື່ອນທີ່ ຕ້ອງອາບັຕິປາຣາຊິກ

ພິກສຸມີໄຖຍຈິຕ ຢ່ອນພາຊນະຂອງຕົນລົງໄປຖືກຕ້ອງຊັພຍ໌ມີຣາຄາ ໕ ມາສກຫລືເກີນກວ່າ ໕ ມາສກ ຕ້ອງອາບັຕິທຸກກຕ ເຮັດໃຫ້ໄຫວ ຕ້ອງອາບັຕິຖຸລລັຈຈັຍ ເຮັດໃຫ້ຊັພຍ໌ເຂົ້າໄປຢູ່ໃນ ພາຊນະຂອງຕົນ ຫລືຫຍິບຂາດຈາກກັນຂຶ້ນມານຶ່ງກຳມື ຕ້ອງອາບັຕິປາຣາຊິກ ພິກສຸມີໄຖຍຈິຕ ຈັບ ຕ້ອງຊັພຍ໌ທີ່ເຂົາຮ້ອຍດ້ວຍດ້າຍສັງ ວາລ ສ້ອຍຄໍ ເຂັມຂັດ ຜ້າສາດົກ ຜ້າໂພກ ຕ້ອງອາບັຕິທຸກກຕ ເຮັດໃຫ້ໄຫວ ຕ້ອງອາບັຕິທຸກກຕ ຈັບປາຍ ຍົກຂຶ້ນ ຕ້ອງອາບັຕິຖຸລລັຈຈັຍ ດຶງຮູດອອກໄປ ຕ້ອງ ອາບັຕິຖຸລລັຈຈັຍ ໃຫ້ພົ້ນປາກຫມໍ້ແມ່ນພຽງປາຍຜົມ ຕ້ອງອາບັຕິປາຣາຊິກ ພິກສຸມີໄຖຍຈິຕ ດື່ມເນີຍໃສ ນ້ຳມັນ ນ້ຳເຜິ້ງ ນ້ຳອ້ອຍ ມີຣາຄາ ໕ ມາສກ ຫລືເກີນ

ກວ່າ ໕ ມາສກ ດ້ວຍການດື່ມຄັ້ງດຽວ ຕ້ອງອາບັຕິປາຣາຊິກ ທຳລາຍ ເຮັດໃຫ້ເຮັ່ງ ເຜົາຖິ້ມ ຫລື ເຮັດໃຫ້ບໍຣິໂພຄບໍ່ໄດ້ ຕ້ອງອາບັຕິທຸກກຕ

## ຊັພຍ໌ທີ່ຢູ່ເທິງບົກ

[໗໕] ທີ່ຊື່ວ່າ ຊັພຍ໌ທີ່ຢູ່ເທິງບົກ ໄດ້ແກ່ ຊັພຍ໌ທີ່ເຂົາວາງໄວ້ເທິງບົກ ພິກສຸມີໄຖຍຈິຕຄິດຈະລັກ ຊັພຍ໌ທີ່ຢູ່ເທິງບົກ ຫາເພື່ອນໄປດ້ວຍຫລືໄປແຕ່ຜູ້ດຽວ ຕ້ອງອາບັຕິທຸກກຕ ຈັບຕ້ອງ ຕ້ອງອາບັຕິ ທຸກກຕ ເຮັດໃຫ້ໄຫວ ຕ້ອງອາບັຕິຖຸລລັຈຈັຍ ເຮັດໃຫ້ເຄື່ອນທີ່ຕ້ອງອາບັຕິປາຣາຊິກ

## ຊັພຍ໌ທີ່ຢູ່ໃນອາກາສ

[໗໖] ທີ່ຊື່ວ່າ ຊັພຍ໌ທີ່ຢູ່ໃນອາກາສ ໄດ້ແກ່ ຊັພຍ໌ທີ່ໄປໃນອາກາສ ຄືນົກຍູງ ນົກຄັບແຄ ນົກກະ ທາ ນົກກະຈາບ ຜ້າສາດົກ ຜ້າໂພກ ຫລືເງິນທອງທີ່ຂາດຫລຸດຕົກລົງ ພິກສຸມີໄຖຍຈິຕຄິດຈະລັກ ຊັພຍ໌ທີ່ຢູ່ໃນອາກາສ ຫາເພື່ອນໄປດ້ວຍຫລືໄປແຕ່ຜູ້ດຽວ ຕ້ອງອາບັຕິທຸກກຕ ຢຸດການໄປຂອງ ຊັພຍ໌ ຕ້ອງອາບັຕິທຸກກຕ ຈັບຕ້ອງ ຕ້ອງອາບັຕິທຸກກຕ ເຮັດໃຫ້ໄຫວ ຕ້ອງອາບັຕິຖຸລລັຈຈັຍ ເຮັດໃຫ້ເຄື່ອນທີ່ ຕ້ອງອາບັຕິປາຣາຊິກ

## ຊັພຍ໌ທີ່ຢູ່ໃນທີ່ແຈ້ງ

[໘໗] ທີ່ຊື່ວ່າ ຊັພຍ໌ທີ່ຢູ່ໃນທີ່ແຈ້ງ ໄດ້ແກ່ ຊັພຍ໌ທີ່ແຂວນໄວ້ໃນທີ່ແຈ້ງ ເຊັ່ນ ຊັພຍ໌ທີ່ຄ້ອງໄວ້ເທິງຕຽງຫລືຕັ່ງ ຫ້ອຍໄວ້ເທິງຮາວຈີວອນ ສາຍຣະດຽງ ທີ່ເດືອຍຝາ ທີ່ເຄື່ອງແຂວນຮູບງາຊ້າງຫລືທີ່ຕົ້ນໄມ້ ໂດຍທີ່ສຸດແມ່ນເທິງເຊີງຮອງບາຕຣ ພິກສຸມີໄຖຍຈິຕຄິດຈະລັກຊັພຍ໌ທີ່ຢູ່ໃນທີ່ແຈ້ງ ຫາເພື່ອນໄປດ້ວຍຫລືໄປແຕ່ຜູ້ດຽວ ຕ້ອງອາບັຕິທຸກກຕ ຈັບຕ້ອງ ຕ້ອງອາບັຕິທຸກກຕ ເຮັດໃຫ້ໄຫວ ຕ້ອງອາບັຕິຖຸລລັຈຈັຍ ເຮັດໃຫ້ເຄື່ອນທີ່ ຕ້ອງອາບັຕິປາຣາຊິກ

## ຊັພຍ໌ທີ່ຢູ່ໃນນ້ຳ

[໘໘] ທີ່ຊື່ວ່າ ຊັພຍ໌ທີ່ຢູ່ໃນນ້ຳ ໄດ້ແກ່ ຊັພຍ໌ທີ່ເຂົາເກັບໄວ້ໃນນ້ຳ ພິກສຸມີໄຖຍຈິຕຄິດຈະລັກຊັພຍ໌ທີ່ຢູ່ໃນນ້ຳ ຫາເພື່ອນໄປດ້ວຍຫລືໄປແຕ່ຜູ້ດຽວ ຕ້ອງອາບັຕິທຸກກຕ ດຳລົງຫລືຜຸດຂຶ້ນໃນນ້ຳ ຕ້ອງອາບັຕິທຸກກຕ ຈັບຕ້ອງ ຕ້ອງອາບັຕິທຸກກຕ ເຮັດໃຫ້ໄຫວ ຕ້ອງອາບັຕິຖຸລລັຈຈັຍ ເຮັດໃຫ້ເຄື່ອນທີ່ ຕ້ອງອາບັຕິປາຣາຊິກ

ພິກສຸມີໄຖຍຈິຕ ຈັບຕ້ອງດອກອຸບົລ ດອກປທຸມ ດອກບຸນທຣິກ ເຫງົ້າບົວ ປາຫລືເຕົ່າທີ່ເກີດໃນນ້ຳນັ້ນ ມີຣາຄາ ໕ ມາສກ ຫລືເກີນກວ່າ ໕ ມາສກ ຕ້ອງອາບັຕິທຸກກຕ ເຮັດໃຫ້ໄຫວ ຕ້ອງອາບັຕິຖຸລລັຈຈັຍ ເຮັດໃຫ້ເຄື່ອນທີ່ ຕ້ອງອາບັຕິປາຣາຊິກ

## ຊັພຍ໌ທີ່ຢູ່ໃນເຮືອ

[໘໙] ທີ່ຊື່ວ່າ ເຮືອ ໄດ້ແກ່ ພາຫນະສຳລັບໃຊ້ຂ້າມນ້ຳ ທີ່ຊື່ວ່າ ຊັພຍ໌ທີ່ຢູ່ໃນເຮືອ ໄດ້ແກ່ຊັພຍ໌ທີ່ເຂົາເກັບໄວ້ໃນເຮືອ ພິກສຸມີໄຖຍຈິຕຄິດຈະລັກຊັພຍ໌ທີ່ຢູ່ໃນເຮືອ ຫາເພື່ອນໄປດ້ວຍຫລືໄປແຕ່ຜູ້ດຽວ ຕ້ອງອາບັຕິທຸກກຕ ຈັບຕ້ອງ ຕ້ອງອາບັຕິທຸກກຕ ເຮັດໃຫ້ໄຫວ ຕ້ອງອາບັຕິຖຸລລັຈຈັຍ ເຮັດໃຫ້ເຄື່ອນທີ່ ຕ້ອງອາບັຕິປາຣາຊິກ ພິກສຸມີໄຖຍຈິຕຄິດຈະລັກເຮືອ ຫາເພື່ອນໄປດ້ວຍຫລືໄປແຕ່ຜູ້ດຽວຕ້ອງທຸກກຕ ຈັບຕ້ອງ ຕ້ອງອາບັຕິທຸກກຕ ເຮັດໃຫ້ໄຫວ ຕ້ອງອາບັຕິຖຸລລັຈຈັຍ ແກ້ເຄື່ອງຜູກ ຕ້ອງອາບັຕິທຸກກຕ ແກ້ເຄື່ອງຜູກແລ້ວຈັບຕ້ອງ ຕ້ອງອາບັຕິທຸກກຕ ເຮັດໃຫ້ໄຫວ ຕ້ອງອາບັຕິຖຸລລັຈຈັຍ ເຮັດໃຫ້ເຮືອລອຍທວນນ້ຳ ລອຍຕາມນ້ຳຫລືລອຍໄປຂວາງລຳນ້ຳ ໃຫ້ເຄື່ອນໄປແມ່ນພຽງປາຍຜົມ ຕ້ອງອາບັຕິປາຣາຊິກ

## ຊັພຍ໌ທີ່ຢູ່ໃນຍານ

[໑໐໐] ທີ່ຊື່ວ່າ ຍານ ໄດ້ແກ່ ວໍ ຣົຖ ກວຽນ ຄານຫາມ ທີ່ຊື່ວ່າຊັພຍ໌ທີ່ຢູ່ໃນຍານ ໄດ້ແກ່ ຊັພຍ໌ທີ່ເຂົາເກັບໄວ້ໃນຍານ ພິກສຸມີໄຖຍຈິຕຄິດຈະລັກຊັພຍ໌ທີ່ຢູ່ໃນຍານ ຫາເພື່ອນໄປດ້ວຍຫລືໄປແຕ່ຜູ້ດຽວ ຕ້ອງອາບັຕິທຸກກຕ ຈັບຕ້ອງ ຕ້ອງອາບັຕິທຸກກຕ ເຮັດໃຫ້ໄຫວ ຕ້ອງອາບັຕິຖຸລລັຈຈັຍ ເຮັດໃຫ້ເຄື່ອນທີ່ ຕ້ອງອາບັຕິປາຣາຊິກ

ພິກສຸມີໄຖຍຈິຕຄິດຈະລັກຍານ ຫາເພື່ອນໄປດ້ວຍຫລືໄປແຕ່ຜູ້ດຽວ ຕ້ອງອາບັຕິທຸກກຕ ຈັບຕ້ອງ ຕ້ອງອາບັຕິທຸກກຕ ເຮັດໃຫ້ໄຫວ ຕ້ອງອາບັຕິຖຸລລັຈຈັຍ ເຮັດໃຫ້ເຄື່ອນທີ່ ຕ້ອງອາບັຕິປາຣາຊິກ

## ຊັພຍ໌ທີ່ນຳຕິດຕົວໄປໄດ້

[໑໐໑] ທີ່ຊື່ວ່າ ຊັພຍ໌ທີ່ນຳຕິດຕົວໄປໄດ້ ໄດ້ແກ່ ຊັພຍ໌ທີ່ທູນໄປ ແບກໄປ ຄອນໄປ ຫິ້ວໄປ ພິກສຸມີໄຖຍຈິຕ ຈັບຕ້ອງຊັພຍ໌ທີ່ຢູ່ເທິງສີສະ ຕ້ອງອາບັຕິທຸກກຕ ເຮັດໃຫ້ໄຫວ ຕ້ອງອາບັຕິຖຸລລັຈຈັຍ ລົດຊັພຍ໌ລົງມາທີ່ໄຫລ່ ຕ້ອງອາບັຕິປາຣາຊິກ ພິກສຸມີໄຖຍຈິຕຈັບຕ້ອງຊັພຍ໌ທີ່ຢູ່ຣະດັບໄຫລ່ ຕ້ອງອາບັຕິທຸກກຕ ເຮັດໃຫ້ໄຫວ ຕ້ອງ

ອາບັຕິຖຸລລັຈຈັຍ ລົດຊັພຍ໌ລົງມາເຖິງຣະດັບແອວ ຕ້ອງອາບັຕິປາຣາຊິກ ພິກສຸມີໄຖຍຈິຕ ຈັບຕ້ອງຊັພຍ໌ຊຶ່ງຢູ່ທີ່ແອວ ຕ້ອງອາບັຕິທຸກກຕ ເຮັດໃຫ້ໄຫວ ຕ້ອງອາບັຕິຖຸລລັຈຈັຍ ໃຊ້ມືຖືໄປ ຕ້ອງອາບັຕິປາຣາຊິກ ພິກສຸມີໄຖຍຈິຕ ວາງຊັພຍ໌ໃນມືລົງເທິງພື້ນ ຕ້ອງອາບັຕິປາຣາຊິກ ຖືເອົາຈາກພື້ນໄປ ຕ້ອງອາບັຕິປາຣາຊິກ

## ຊັພຍ໌ທີ່ຢູ່ໃນສວນ

[໑໐໔] ທີ່ຊື່ວ່າ ສວນ ໄດ້ແກ່ ສວນໄມ້ດອກ ສວນຜົລໄມ້ ທີ່ຊື່ວ່າ ຊັພຍ໌ທີ່ຢູ່ໃນສວນ ໄດ້ແກ່ ຊັພຍ໌ທີ່ເຂົາເກັບໄວ້ໃນສວນໂດຍຖານະ ໔ ຄື ຝັງຢູ່ໃນແຜ່ນດິນ ຕັ້ງຢູ່ເທິງພື້ນດິນ ລອຍຢູ່ໃນອາກາສ ແຂວນຢູ່ໃນທີ່ແຈ້ງ ພິກສຸມີໄຖຍຈິຕຄິດຈະລັກຊັພຍ໌ທີ່ຢູ່ໃນສວນ ຫາເພື່ອນໄປດ້ວຍຫລືໄປແຕ່ຜູ້ດຽວ ຕ້ອງອາບັຕິທຸກກຕ ຈັບຕ້ອງ ຕ້ອງອາບັຕິທຸກກຕ ເຮັດໃຫ້ໄຫວ ຕ້ອງອາບັຕິຖຸລລັຈຈັຍ ເຮັດໃຫ້ເຄື່ອນທີ່ ຕ້ອງອາບັຕິປາຣາຊິກ ພິກສຸມີໄຖຍຈິຕ ຈັບຕ້ອງຮາກ ເປືອກ ໃບ ດອກຫລືຫມາກຜົລໃນສວນນັ້ນ ມີຣາຄາ ໕ ມາສກຫລືເກີນກວ່າ ໕ ມາສກ ຕ້ອງອາບັຕິທຸກກຕ ເຮັດໃຫ້ໄຫວ ຕ້ອງອາບັຕິຖຸລລັຈຈັຍ ເຮັດໃຫ້ເຄື່ອນທີ່ ຕ້ອງອາບັຕິປາຣາຊິກ

ພິກສຸກ່າວຕູ່ເອົາທີ່ສວນ ຕ້ອງອາບັຕິທຸກກຕ ເຮັດໃຫ້ເຈົ້າຂອງເກີດຄວາມສົງສັຍ ຕ້ອງອາບັຕິ

ຖຸລລັຈຈັຍ ຫາກເຈົ້າຂອງທອດທຸຣະວ່າຈະບໍ່ເປັນຂອງເຮົາ ຕ້ອງອາບັຕິປາຣາຊິກ ພິກສຸເມື່ອດຳເນີນຄດີຊນະຄວາມເຈົ້າຂອງ ຕ້ອງອາບັຕິປາຣາຊິກ ເມື່ອດຳເນີນຄດີເສັຽຄວາມ ຕ້ອງອາບັຕິຖຸລລັຈຈັຍ

## ຊັພຍ໌ທີ່ຢູ່ໃນວັດ

[໑໐໓] ທີ່ຊື່ວ່າ ຊັພຍ໌ທີ່ຢູ່ໃນວັດ ໄດ້ແກ່ ຊັພຍ໌ທີ່ເຂົາເກັບໄວ້ໃນວັດໂດຍຖານະ ໔ ຄື ຝັງຢູ່ໃນແຜ່ນດິນ ຕັ້ງຢູ່ເທິງພື້ນດິນ ລອຍຢູ່ໃນອາກາສ ແຂວນຢູ່ໃນທີ່ແຈ້ງ ພິກສຸມີໄຖຍຈິຕຄິດຈະລັກຊັພຍ໌ທີ່ຢູ່ໃນວັດ ຫາເພື່ອນໄປດ້ວຍຫລືໄປແຕ່ຜູ້ດຽວ ຕ້ອງອາບັຕິທຸກກຕ ຈັບຕ້ອງ ຕ້ອງອາບັຕິທຸກກຕ ເຮັດໃຫ້ໄຫວ ຕ້ອງອາບັຕິຖຸລລັຈ ຈັຍ ເຮັດໃຫ້ເຄື່ອນທີ່ ຕ້ອງອາບັຕິປາຣາຊິກ ພິກສຸກ່າວຕູ່ເອົາທີ່ວັດ ຕ້ອງອາບັຕິທຸກກຕ ເຮັດໃຫ້ເຈົ້າຂອງເກີດຄວາມສົງສັຍ ຕ້ອງອາບັຕິຖຸລລັຈຈັຍ ຫາກເຈົ້າຂອງທອດທຸຣະວ່າ ຈະບໍ່ເປັນຂອງເຮົາ ຕ້ອງອາບັຕິປາຣາຊິກ ພິກສຸເມື່ອດຳເນີນຄດີ ຊນະຄວາມເຈົ້າຂອງ ຕ້ອງອາບັຕິປາຣາຊິກ ເມື່ອດຳເນີນຄດີເສັຽຄວາມ ຕ້ອງອາບັຕິຖຸລລັຈຈັຍ

## ຊັພຍ໌ທີ່ຢູ່ໃນນາ

[໑໐໔] ທີ່ຊື່ວ່າ ນາ ໄດ້ແກ່ ທີ່ຊຶ່ງມີບຸພພັນຊາຕິຫລືອປຣັນຊາຕິເກີດ

ທີ່ຊື່ວ່າ ຊັພຍ໌ທີ່ຢູ່ໃນນາ ໄດ້ແກ່ ຊັພຍ໌ທີ່ເຂົາເກັບໄວ້ໃນນາໂດຍຖານະ ໔ ຄື ຝັງຢູ່ໃນແຜ່ນດິນ ຕັ້ງຢູ່ເທິງພື້ນດິນ ລອຍຢູ່ໃນອາກາສ ແຂວນຢູ່ໃນທີ່ແຈ້ງ ພິກສຸມີໄຖຍຈິຕຄິດຈະລັກຊັພຍ໌ທີ່ຢູ່ໃນນາ ຫາເພື່ອນໄປດ້ວຍຫລືໄປແຕ່ຜູ້ດຽວ ຕ້ອງອາບັຕິທຸກກຕ ຈັບຕ້ອງ ຕ້ອງອາບັຕິທຸກກຕ ເຮັດໃຫ້ໄຫວ ຕ້ອງອາບັຕິຖຸລລັຈຈັຍ ເຮັດໃຫ້ເຄື່ອນທີ່ ຕ້ອງອາບັຕິປາຣາຊິກ

ພິກສຸມີໄຖຍຈິຕຈັບຕ້ອງບຸພພັນຊາຕິຫລືອປຣັນຊາຕິທີ່ເກີດໃນນານັ້ນ ມີຣາຄາ ໕ ມາສກ ຫລືເກີນກວ່າ ໕ ມາສກ ຕ້ອງອາບັຕິທຸກກຕ ເຮັດໃຫ້ໄຫວ ຕ້ອງອາບັຕິຖຸລລັຈຈັຍ ເຮັດໃຫ້ເຄື່ອນທີ່ ຕ້ອງອາບັຕິປາຣາຊິກ

ພິກສຸກ່າວຕູ່ເອົາທີ່ນາ ຕ້ອງອາບັຕິທຸກກຕ ເຮັດໃຫ້ເຈົ້າຂອງເກີດຄວາມສົງສັຍ ຕ້ອງອາບັຕິຖຸລລັຈຈັຍ ຫາກເຈົ້າຂອງທອດທຸຣະວ່າ ຈະບໍ່ເປັນຂອງເຮົາ ຕ້ອງອາບັຕິປາຣາຊິກ

ພິກສຸເມື່ອດຳເນີນຄດີ ຊນະຄວາມເຈົ້າຂອງ ຕ້ອງອາບັຕິປາຣາຊິກ ເມື່ອດຳເນີນຄດີເສັຽຄວາມ ຕ້ອງອາບັຕິຖຸລລັຈຈັຍ

ພິກສຸປັກຫລັກ ຂຶງເຊືອກ ລ້ອມຮົ້ວ ຫລືຖົມຄັນນາໃຫ້ຮຸກລ້ຳທີ່ນາ ຕ້ອງອາບັຕິທຸກກຕ ເມື່ອຄວາມ

ພຍາຍາມຣຸກລ້ຳທີ່ນາອີກຄັ້ງດຽວຈະສຳເຣັຈ ຕ້ອງອາບັຕິຖຸລລັຈຈັຍ ເມື່ອຄວາມພຍາຍາມຄັ້ງສຸດທ້າຍສຳເຣັຈ ຕ້ອງອາບັຕິປາຣາຊິກ

## ຊັພຍ໌ທີ່ຢູ່ໃນພື້ນທີ່

[໑໐໕] ທີ່ຊື່ວ່າ ພື້ນທີ່ ໄດ້ແກ່ ພື້ນທີ່ສວນ ພື້ນທີ່ວັດ ທີ່ຊື່ວ່າ ຊັພຍ໌ທີ່ຢູ່ໃນພື້ນທີ່ ໄດ້ແກ່ ຊັພຍ໌ທີ່ເຂົາເກັບໄວ້ໃນພື້ນທີ່ ໂດຍຖານະ ໔ ຄື ຝັງຢູ່ໃນແຜ່ນດິນ ຕັ້ງຢູ່ເທິງພື້ນດິນ ລອຍຢູ່ໃນອາກາສ ແຂວນຢູ່ໃນທີ່ແຈ້ງ

ພິກສຸມີໄຖຍຈິຕຄິດຈະລັກຊັພຍ໌ທີ່ຢູ່ໃນພື້ນທີ່ ຫາເພື່ອນໄປດ້ວຍຫລືໄປແຕ່ຜູ້ດຽວ ຕ້ອງອາບັຕິທຸກກົຎ ຈັບຕ້ອງ ຕ້ອງອາບັຕິທຸກກົຎ ເຮັດໃຫ້ໄຫວ ຕ້ອງອາບັຕິຖຸລລັຈຈັຍ ເຮັດໃຫ້ເຄື່ອນທີ່ ຕ້ອງອາບັຕິປາຣາຊິກ

ພິກສຸກ່າວຕູ່ເອົາພື້ນທີ່ ຕ້ອງອາບັຕິທຸກກົຎ ເຮັດໃຫ້ເຈົ້າຂອງເກີດຄວາມສົງສັຍ ຕ້ອງອາບັຕິຖຸລລັຈຈັຍ ຫາກເຈົ້າຂອງທອດທູຣະວ່າ ຈະບໍ່ເປັນຂອງເຮົາ ຕ້ອງອາບັຕິປາຣາຊິກ

ພິກສຸເມື່ອດຳເນີນຄດີ ຊນະຄວາມເຈົ້າຂອງ ຕ້ອງອາບັຕິປາຣາຊິກ ເມື່ອດຳເນີນຄດີເສັຽຄວາມ ຕ້ອງອາບັຕິຖຸລລັຈຈັຍ

ພິກສຸປັກຫລັກ ຂຶງເຊືອກ ລ້ອມຮົ້ວຫລືຖົມຄັນນາໃຫ້ຣຸກລ້ຳພື້ນທີ່ ຕ້ອງອາບັຕິທຸກກົຎ ເມື່ອຄວາມພຍາຍາມຣຸກລ້ຳພື້ນທີ່ອີກຄັ້ງດຽວຈະສຳເຣັຈ ຕ້ອງອາບັຕິຖຸລລັຈຈັຍ ເມື່ອຄວາມພຍາຍາມຄັ້ງສຸດທ້າຍສຳເຣັຈ ຕ້ອງອາບັຕິປາຣາຊິກ

## ຊັພຍ໌ທີ່ຢູ່ໃນຫມູ່ບ້ານ

[໑໐໖] ທີ່ຊື່ວ່າ ຊັພຍ໌ທີ່ຢູ່ໃນຫມູ່ບ້ານ ໄດ້ແກ່ ຊັພຍ໌ທີ່ເຂົາເກັບໄວ້ໃນຫມູ່ບ້ານ ໂດຍຖານະ ໔ ຄື ຝັງຢູ່ໃນແຜ່ນດິນ ຕັ້ງຢູ່ເທິງພື້ນດິນ ລອຍຢູ່ໃນອາກາສ ແຂວນຢູ່ໃນທີ່ແຈ້ງ ພິກສຸມີໄຖຍຈິຕຈິຕຄິດຈະລັກຊັພຍ໌ທີ່ເກັບໄວ້ໃນຫມູ່ບ້ານ ຫາເພື່ອນໄປດ້ວຍຫລືໄປແຕ່ຜູ້ດຽວ ຕ້ອງອາບັຕິທຸກກົຎ ຈັບຕ້ອງ ຕ້ອງອາບັຕິທຸກກົຎ ເຮັດໃຫ້ໄຫວ ຕ້ອງອາບັຕິຖຸລລັຈຈັຍເຮັດໃຫ້ເຄື່ອນທີ່ ຕ້ອງອາບັຕິປາຣາຊິກ

## ຊັພຍ໌ທີ່ຢູ່ໃນປ່າ

[໑໐໗] ທີ່ຊື່ວ່າ ປ່າ ໄດ້ແກ່ ປ່າທີ່ມນຸສ຺ຍ໌ຄອບຄອງ ທີ່ຊື່ວ່າ ຊັພຍ໌ທີ່ຢູ່ໃນປ່າ ໄດ້ແກ່ ຊັພຍ໌ທີ່ເຂົາເກັບໄວ້ໃນປ່າ ໂດຍຖານະ ໔ ຄື ຝັງຢູ່ໃນແຜ່ນດິນ ຕັ້ງຢູ່ເທິງພື້ນດິນ ລອຍຢູ່ໃນອາກາສ຺ ແຂວນຢູ່ໃນທີ່ແຈ້ງ ຕ້ອງອາບັຕິທຸກກຕ຺ ຈັບຕ້ອງ ຕ້ອງອາບັຕິທຸກກຕ຺ ເຮັດໃຫ້ໄຫວ ຕ້ອງອາບັຕິຖຸລລັຈຈັຍ ເຮັດໃຫ້ເຄື່ອນທີ່ ຕ້ອງອາບັຕິປາຣາຊິກ

ພິກສຸມີໄຖຍຈິຕ ຈັບຕ້ອງໄມ້ ເຄືອໄມ້ ຫຍ້າທີ່ເກີດໃນປ່ານັ້ນ ມີຣາຄາ ໕ ມາສກຫລືເກີນກວ່າ ໕ ມາສກ ຕ້ອງອາບັຕິທຸກກຕ຺ ເຮັດໃຫ້ໄຫວ ຕ້ອງອາບັຕິຖຸລລັຈຈັຍ ເຮັດໃຫ້ເຄື່ອນທີ່ ຕ້ອງອາບັຕິປາຣາຊິກ

## ນ້ຳ

[໑໐໘] ທີ່ຊື່ວ່າ ນ້ຳ ໄດ້ແກ່ ນ້ຳທີ່ຢູ່ໃນພາຊນະ ຂັງຢູ່ໃນສຣະໂບກຂຣນີ ຫລືໃນສ້າງ ພິກສຸມີໄຖຍຈິຕ ຈັບຕ້ອງ ຕ້ອງອາບັຕິທຸກກຕ຺ ເຮັດໃຫ້ໄຫວ ຕ້ອງອາບັຕິຖຸລລັຈຈັຍ ເຮັດໃຫ້ເຄື່ອນທີ່ ຕ້ອງອາບັຕິປາຣາຊິກ

ພິກສຸມີໄຖຍຈິຕ ຢ່ອນພາຊນະຂອງຕົນລົງໄປຖືກຕ້ອງນ້ຳ ມີຣາຄາ ໕ ມາສກຫລືເກີນກວ່າ ໕ ມາສກ ຕ້ອງອາບັຕິທຸກກຕ຺ ເຮັດໃຫ້ໄຫວ ຕ້ອງອາບັຕິຖຸລລັຈຈັຍ ເຮັດໃຫ້ນ້ຳໄຫລເຂົ້າໄປໃນພາຊນະຂອງຕົນ ຕ້ອງອາບັຕິປາຣາຊິກ

ພິກສຸທຳລາຍຄັນນາ ຕ້ອງອາບັຕິທຸກກຕ຺ ທຳລາຍຄັນນາທຳນ້ຳໃຫ້ໄຫລອອກໄປ ມີຣາຄາ ໕ ມາສກຫລືເກີນກວ່າ ໕ ມາສກ ຕ້ອງອາບັຕິປາຣາຊິກ ເຮັດໃຫ້ນ້ຳໄຫລອອກໄປມີຣາຄາເກີນກວ່າ ໑ ມາສກ ຫລືນ້ອຍກວ່າ ໕ ມາສກ ຕ້ອງອາບັຕິຖຸລລັຈຈັຍ ເຮັດໃຫ້ນ້ຳໄຫລອອກໄປ ມີຣາຄາ ໑ ມາສກຫລືຢ່ອນກວ່າ ໑ ມາສກ ຕ້ອງອາບັຕິທຸກກຕ຺

## ໄມ້ຊຳຣະແຂ້ວ

[໑໐໙] ທີ່ຊື່ວ່າ ໄມ້ຊຳຣະແຂ້ວ ໄດ້ແກ່ ໄມ້ຊຳຣະແຂ້ວທີ່ຕັດແລ້ວຫລືຍັງບໍ່ໄດ້ຕັດ ພິກສຸມີໄຖຍຈິຕ ຈັບຕ້ອງໄມ້ຊຳຣະແຂ້ວ ມີຣາຄາ ໕ ມາສກ ຫລືເກີນກວ່າ ໕ ມາສກ ຕ້ອງອາບັຕິທຸກກຕ຺ ເຮັດໃຫ້ໄຫວ ຕ້ອງອາບັຕິຖຸລລັຈຈັຍ ເຮັດໃຫ້ເຄື່ອນທີ່ ຕ້ອງອາບັຕິປາຣາຊິກ

## ຕົ້ນໄມ້ເຈົ້າປ່າ

[໑໑໐] ທີ່ຊື່ວ່າ ຕົ້ນໄມ້ເຈົ້າປ່າ ໄດ້ແກ່ ຕົ້ນໄມ້ທີ່ຄົນທັງຫລາຍຄອບຄອງ ເປັນຕົ້ນໄມ້ໃຊ້ສອຍໄດ້ ພິກສຸມີໄຖຍຈິຕ ຕັດ ຕ້ອງອາບັຕິທຸກກຕ ທຸກໆ ຄັ້ງທີ່ຟັນຕົ້ນໄມ້ ເມື່ອຟັນອີກຄັ້ງດຽວ ຕົ້ນໄມ້ຈະຂາດ ຕ້ອງອາບັຕິຖຸລລັຈຈັຍ ເມື່ອຟັນຕົ້ນໄມ້ຂາດ ຕ້ອງອາບັຕິປາຣາຊິກ

ຊັພຍ໌ທີ່ມີຜູ້ນຳໄປ

[໑໑໑] ທີ່ຊື່ວ່າ ຊັພຍ໌ທີ່ມີຜູ້ນຳໄປ ໄດ້ແກ່ ສິ່ງຂອງທີ່ຜູ້ອື່ນນຳໄປ ພິກສຸມີໄຖຍຈິຕ ຈັບຕ້ອງ ຕ້ອງອາບັຕິທຸກກຕ ເຮັດໃຫ້ໄຫວ ຕ້ອງອາບັຕິຖຸລລັຈຈັຍ ເຮັດໃຫ້ເຄື່ອນທີ່ ຕ້ອງອາບັຕິປາຣາຊິກ
ພິກສຸຄິດວ່າ ຈະນຳຊັພຍ໌ພ້ອມກັບຜູ້ຖືຊັພຍ໌ຍ່າງໄປ ໃຫ້ຍ່າງຂາທີ ໑ ໄປ ຕ້ອງອາບັຕິຖຸລລັຈຈັຍ ໃຫ້ຍ່າງຂາທີ ໔ ໄປ ຕ້ອງອາບັຕິປາຣາຊິກ
ພິກສຸເຮັດໃຫ້ຊັພຍ໌ຕົກດ້ວຍຄິດວ່າ ຈະເກັບຊັພຍ໌ທີ່ຕົກ ຕ້ອງອາບັຕິທຸກກຕ ມີໄຖຍຈິຕຈັບຕ້ອງຊັພຍ໌ທີ່ຕົກ ມີຣາຄາ ໕ ມາສກຫລືເກີນກວ່າ ໕ ມາສກ ຕ້ອງອາບັຕິທຸກກຕ ເຮັດໃຫ້ໄຫວ ຕ້ອງອາບັຕິຖຸລລັຈຈັຍ ເຮັດໃຫ້ເຄື່ອນທີ່ ຕ້ອງອາບັຕິປາຣາຊິກ

ຊັພຍ໌ທີ່ເຂົາຝາກໄວ້

[໑໑໔] ທີ່ຊື່ວ່າ ຊັພຍ໌ທີ່ເຂົາຝາກໄວ້ ໄດ້ແກ່ ສິ່ງຂອງທີ່ຜູ້ອື່ນໃຫ້ເກັບໄວ້ ພິກສຸຮັບຝາກຂອງ ເມື່ອເຈົ້າຂອງທວງວ່າ "ຈົ່ງຄືນຊັພຍ໌ໃຫ້ແກ່ຂ້າພະເຈົ້າ" ປຕິເສທວ່າ "ອາຕມາບໍ່ໄດ້ຮັບໄວ້" ຕ້ອງອາບັຕິທຸກກຕ ເຮັດໃຫ້ເຈົ້າຂອງເກີດຄວາມສົງສັຍ ຕ້ອງອາບັຕິຖຸລລັຈຈັຍ ຫາກເຈົ້າຂອງທອດທຸຣະວ່າ ຈະບໍ່ຄືນໃຫ້ເຮົາ ຕ້ອງອາບັຕິປາຣາຊິກ
ພິກສຸເມື່ອດຳເນີນຄດີ ຊນະຄວາມເຈົ້າຂອງ ຕ້ອງອາບັຕິປາຣາຊິກ ເມື່ອດຳເນີນຄດີເສັຽຄວາມ ຕ້ອງອາບັຕິຖຸລລັຈຈັຍ

ດ່ານພາສີ

[໑໑໖] ທີ່ຊື່ວ່າ ດ່ານພາສີ ໄດ້ແກ່ ທີ່ຊຶ່ງພຣະເຈົ້າແຜ່ນດິນຊົງກຳຫນົດເຂຕ ທີ່ພູເຂົາຂາດກໍດີ ທ່ານ້ຳກໍດີ ປະຕູເຂົ້າຫມູ່ບ້ານກໍດີ ດ້ວຍຮັບສັ່ງວ່າ "ຈົ່ງເກັບພາສີຜູ້ຜ່ານເຂົ້າໄປທີ່ນັ້ນ" ພິກສຸເຂົ້າໄປທີ່ດ່ານພາສີນັ້ນ ມີໄຖຍຈິຕຈັບຕ້ອງຊັພຍ໌ທີ່ຄວຣເສັຽພາສີມີຣາຄາ ໕ ມາສກຫລືເກີນກວ່າ ໕ ມາສກ ຕ້ອງອາບັຕິທຸກກຕ ເຮັດໃຫ້ໄຫວ ຕ້ອງອາບັຕິຖຸລລັຈຈັຍ ຍ່າງຂາທີ ໑ ຜ່ານດ່ານພາສີໄປ ຕ້ອງ

ອາບັຕິຖຸລລັຈຈັຍ ຍ່າງຂາທີ ໔ ຜ່ານດ່ານພາສີໄປ ຕ້ອງອາບັຕິປາຣາຊິກ ພິກສຸຢືນຢູ່ພາຍໃນດ່ານພາສີ ໂຍນຊັພຍ໌ໃຫ້ຕົກນອກດ່ານພາສີ ຕ້ອງອາບັຕິປາຣາຊິກ ພິກສຸຫລີກດ່ານພາສີ ຕ້ອງອາບັຕິທຸກກຕ

## ສັຕວ໌ມີຊີວິຕ

[໑໑໔] ທີ່ຊື່ວ່າ ສັຕວ໌ມີຊີວິຕ ຫມາຍເອົາມນຸສຍ໌ທີ່ມີຊີວິຕ ພິກສຸມີໄຖຍຈິຕ ຈັບຕ້ອງ ຕ້ອງອາບັຕິທຸກກຕ ເຮັດໃຫ້ໄຫວ ຕ້ອງອາບັຕິຖຸລລັຈຈັຍ ເຮັດໃຫ້ເຄື່ອນທີ່ ຕ້ອງອາບັຕິປາຣາຊິກ ພິກສຸຄິດຈະພາຍ່າງໄປ ໃຫ້ຍ່າງບາດກ້າວທີ ໑ ໄປ ຕ້ອງອາບັຕິຖຸລລັຈຈັຍ ໃຫ້ຍ່າງບາດກ້າວທີ ໔ ໄປ ຕ້ອງອາບັຕິປາຣາຊິກ

## ສັຕວ໌ບໍ່ມີຕີນ

ທີ່ຊື່ວ່າ ສັຕວ໌ບໍ່ມີຕີນ ໄດ້ແກ່ ງູ ປາ ພິກສຸມີໄຖຍຈິຕ ຈັບຕ້ອງສັຕວ໌ບໍ່ມີຕີນ ມີຣາຄາ ໕ ມາສກຫລືເກີນກວ່າ ໕ ມາສກ ຕ້ອງອາບັຕິທຸກກຕ ເຮັດໃຫ້ໄຫວ ຕ້ອງອາບັຕິຖຸລລັຈຈັຍ ເຮັດໃຫ້ເຄື່ອນທີ່ ຕ້ອງອາບັຕິປາຣາຊິກ

## ສັຕວ໌ ໒ ຕີນ

[໑໑໕] ທີ່ຊື່ວ່າ ສັຕວ໌ ໒ ຕີນ ໄດ້ແກ່ ມນຸສຍ໌ ນົກ ພິກສຸມີໄຖຍຈິຕ ຈັບຕ້ອງ ຕ້ອງອາບັຕິທຸກກຕ ເຮັດໃຫ້ໄຫວ ຕ້ອງອາບັຕິຖຸລລັຈຈັຍ ເຮັດໃຫ້ເຄື່ອນທີ່ ຕ້ອງອາບັຕິປາຣາຊິກ ພິກສຸຄິດຈະພາຍ່າງໄປ ໃຫ້ຍ່າງບາດກ້າວທີ ໑ ໄປ ຕ້ອງອາບັຕິຖຸລລັຈຈັຍ ໃຫ້ຍ່າງບາດກ້າວທີ ໒ ໄປ ຕ້ອງອາບັຕິປາຣາຊິກ

## ສັຕວ໌ ໔ ຕີນ

[໑໑໖] ທີ່ຊື່ວ່າ ສັຕວ໌ ໔ ຕີນ ໄດ້ແກ່ ຊ້າງ ມ້າ ອູຖ ໂຄ ລາ ສັຕວ໌ລ້ຽງ ພິກສຸມີໄຖຍຈິຕ ຈັບຕ້ອງ ຕ້ອງອາບັຕິທຸກກຕ ເຮັດໃຫ້ໄຫວ ຕ້ອງອາບັຕິຖຸລລັຈຈັຍ ເຮັດໃຫ້ເຄື່ອນທີ່ ຕ້ອງອາບັຕິປາຣາຊິກ ພິກສຸຄິດຈະພາຍ່າງໄປ ໃຫ້ຍ່າງບາດກ້າວທີ ໑ ໄປ ຕ້ອງອາບັຕິຖຸລລັຈຈັຍ ໃຫ້ຍ່າງ

ບາດກ້າວທີ ໔ ໄປ ຕ້ອງອາບັຕິຖຸລລັຈ ຈັຍ ໃຫ້ຍ່າງບາດກ້າວທີ ໓ ໄປ ຕ້ອງອາບັຕິຖຸລລັຈຈັຍ ໃຫ້ຍ່າງບາດກ້າວທີ ໔ ໄປ ຕ້ອງອາບັຕິປາຣາຊິກ

## ສັຕວ໌ມີຕີນມາກ

[໑໑໗] ທີ່ຊື່ວ່າ ສັຕວ໌ມີຕີນມາກ ໄດ້ແກ່ ສັຕວ໌ຈຳພວກແມງປ່ອງ ຂີ້ເຂັບ ບົ້ງຂົນ ພິກສຸມີໄຖຍຈິຕ ຈັບຕ້ອງສັຕວ໌ມີຕີນມາກ ທີ່ມີຣາຄາ ໕ ມາສກ ຫລືເກີນກວ່າ ໕ ມາສກ ຕ້ອງອາບັຕິທຸກກຕ ເຮັດໃຫ້ໄຫວ ຕ້ອງອາບັຕິຖຸລລັຈຈັຍ ເຮັດໃຫ້ເຄື່ອນທີ່ ຕ້ອງອາບັຕິປາຣາຊິກ ພິກສຸຄິດຈະພາຍ່າງໄປ ໃຫ້ຍ່າງກ້າວໄປ ຕ້ອງອາບັຕິຖຸລ ລັຈຈັຍ ທຸກໆກ້າວ ໃຫ້ຍ່າງຕີນຫລັງສຸດກ້າວໄປ ຕ້ອງອາບັຕິປາຣາຊິກ

## ພິກສຸຜູ້ສັ່ງ

[໑໑໘] ທີ່ຊື່ວ່າ ພິກສຸຜູ້ສັ່ງ ໄດ້ແກ່ ພິກສຸສັ່ງກຳຫນົດລັກຊັພຍ໌ວ່າ ທ່ານຈົ່ງລັກຊັພຍ໌ອັນນີ້ ຕ້ອງອາບັຕິທຸກກຕ ພິກສຸຮັບຄຳສັ່ງລັກຊັພຍ໌ນັ້ນມາໄດ້ ຕ້ອງອາບັຕິປາຣາຊິກ ທັງ ໔ ຮູບ

## ພິກສຸຜູ້ຮັບຂອງຝາກ

ທີ່ຊື່ວ່າ ພິກສຸຜູ້ຮັບຂອງຝາກ ໄດ້ແກ່ ພິກສຸຜູ້ຮັກສາຊັພຍ໌ທີ່ເຂົານຳມາຝາກໄວ້ ພິກສຸມີໄຖຍຈິຕ ຈັບຕ້ອງຊັພຍ໌ມີຣາຄາ ໕ ມາສກ ຫລືເກີນກວ່າ ໕ ມາສກ ຕ້ອງອາບັຕິທຸກກຕ ເຮັດໃຫ້ໄຫວ ຕ້ອງອາບັຕິຖຸລລັຈຈັຍ ເຮັດໃຫ້ເຄື່ອນທີ່ ຕ້ອງອາບັຕິປາຣາຊິກ

## ການຊັກຊວນກັນໄປລັກ

ທີ່ຊື່ວ່າ ການຊັກຊວນກັນໄປລັກ ໄດ້ແກ່ ພິກສຸຫລາຍຮູບຊັກຊວນກັນແລ້ວ ຮູບນຶ່ງລັກຊັພຍ໌ມາໄດ້ ຕ້ອງອາບັຕິປາຣາຊິກທຸກຮູປ

## ການນັດຫມາຍ

[໑໑໙] ທີ່ຊື່ວ່າ ການນັດຫມາຍ ອທິບາຍວ່າ ພິກສຸທຳການນັດຫມາຍວ່າ ຈົ່ງລັກຊັພຍ໌ຕາມເວລານັດຫມາຍນັ້ນ ຄື ໃນເວລາກ່ອນສັນອາຫານ ຫລືໃນເວລາຫລັງຫລັງອາຫານ ໃນເວລາກາງຄືນ

ຫລືໃນເວລາກາງເວັນ ຕ້ອງອາບັຕິທຸກກົຕ ພິກສຸຜູ້ລັກ ລັກຊັພຍ໌ໄດ້ມາຕາມເວລານັດໝາຍນັ້ນ ຕ້ອງອາບັຕິປາຣາຊິກທັງ ໔ ຮູບ ພິກສຸຜູ້ລັກ ລັກຊັພຍ໌ໄດ້ມາກ່ອນຫລືຫລັງເວລານັດໝາຍນັ້ນ ພິກສຸຜູ້ນັດໝາຍບໍ່ຕ້ອງອາບັຕິ ພິກສຸຜູ້ລັກ ຕ້ອງອາ ບັຕິປາຣາຊິກ

## ກາຣທຳນິມິຕ

[໑໘໐] ທີ່ຊື່ວ່າ ກາຣທຳນິມິຕ ອທິບາຍວ່າ ພິກສຸທຳນິມິຕວ່າ ເຮົາຈັກຂຍິບຕາ ຍັກຄິ້ວ ຫລືງຶກສີສະ ທ່ານຈົ່ງລັກຊັພຍ໌ນັ້ນ ຕາມທີ່ເຮົາທຳນິມິຕນັ້ນ ຕ້ອງອາບັຕິທຸກກົຕ ພິກສຸຜູ້ລັກ ລັກຊັພຍ໌ໄດ້ມາຕາມກາຣທຳນິມິຕນັ້ນ ຕ້ອງອາບັຕິປາຣາຊິກທັງ ໔ ຮູບ ພິກສຸຜູ້ລັກລັກຊັພຍ໌ມາໄດ້ກ່ອນຫລືຫລັງກາຣທຳນິມິຕນັ້ນ ພິກສຸຜູ້ທຳນິມິຕບໍ່ຕ້ອງອາບັຕິ ພິກສຸຜູ້ລັກຕ້ອງອາບັຕິປາຣາຊິກ

## ກາຣສັ່ງ

[໑໘໑] ພິກສຸສັ່ງພິກສຸວ່າ "ທ່ານຈົ່ງລັກຊັພຍ໌ນີ້ມາ" ຕ້ອງອາບັຕິທຸກກົຕ ພິກສຸຜູ້ຮັບຄຳສັ່ງສຳຄັນຊັພຍ໌ນັ້ນວ່າເປັນຊັພຍ໌ນັ້ນ ລັກຊັພຍ໌ນັ້ນມາໄດ້ ຕ້ອງອາບັຕິປາຣາຊິກ ທັງ ໔ ຮູບ ພິກສຸສັ່ງພິກສຸວ່າ "ທ່ານຈົ່ງລັກຊັພຍ໌ນີ້ມາ" ຕ້ອງອາບັຕິທຸກກົຕ ພິກສຸຜູ້ຮັບຄຳສັ່ງສຳຄັນຊັພຍ໌ນັ້ນວ່າເປັນຊັພຍ໌ນັ້ນ ລັກຊັພຍ໌ອື່ນມາ ພິກສຸຜູ້ສັ່ງບໍ່ຕ້ອງອາບັຕິ ພິກສຸຜູ້ລັກຕ້ອງອາບັຕິປາຣາຊິກ

ພິກສຸສັ່ງພິກສຸວ່າ "ທ່ານຈົ່ງລັກຊັພຍ໌ນີ້ມາ" ຕ້ອງອາບັຕິທຸກກົຕ ພິກສຸຜູ້ຮັບຄຳສັ່ງສຳຄັນຊັພຍ໌ນັ້ນວ່າເປັນຊັພຍ໌ອື່ນ ແຕ່ລັກຊັພຍ໌ນັ້ນມາໄດ້ ຕ້ອງອາບັຕິປາຣາຊິກທັງ ໔ ຮູບ

ພິກສຸສັ່ງພິກສຸວ່າ "ທ່ານຈົ່ງລັກຊັພຍ໌ນີ້ມາ" ຕ້ອງອາບັຕິທຸກກົຕ ພິກສຸຜູ້ຮັບຄຳສັ່ງສຳຄັນຊັພຍ໌ນັ້ນວ່າເປັນຊັພຍ໌ອື່ນ ລັກຊັພຍ໌ອື່ນມາໄດ້ ພິກສຸຜູ້ສັ່ງບໍ່ຕ້ອງອາບັຕິ ພິກສຸຜູ້ລັກຕ້ອງອາບັຕິປາຣາຊິກ

ພິກສຸ (ຜູ້ເປັນອາຈາຣຍ໌) ສັ່ງພິກສຸ (ຊື່ວ່າພຸທຫຣັກຂິຕ) ວ່າ "ທ່ານຈົ່ງບອກພິກສຸຊື່(ທັມມຣັກຂິຕ)ນີ້ວ່າ ຈົ່ງ ບອກ ພິກສຸຊື່(ສັງຂຣັກຂິຕ)ນີ້ວ່າ 'ຈົ່ງລັກຊັພຍ໌ນີ້ມາ" ຕ້ອງອາບັຕິທຸກກົຕ ພິກສຸຜູ້ຮັບຄຳສັ່ງໄປບອກພິກສຸອີກ ຮູບນຶ່ງ ຕ້ອງອາບັຕິທຸກກົຕ ພິກສຸຜູ້ລັກຮັບຄຳສັ່ງພິກສຸຜູ້ສັ່ງ ຄັ້ງທຳອິດຕ້ອງອາບັຕິຖຸລລັຈຈັຍ ພິກສຸຜູ້ລັກ ລັກ ຊັພຍ໌ນັ້ນມາໄດ້ ຕ້ອງອາບັຕິປາຣາຊິກທຸກຮູປ

ພິກສຸ (ຜູ້ເປັນອາຈາຣຍ໌) ສັ່ງພິກສຸ (ຊື່ວ່າພຸທຫຣັກຂິຕ) ວ່າ "ທ່ານຈົ່ງບອກພິກສຸຊື່(ທັມມຣັກຂິຕ)ນີ້ວ່າ ຈົ່ງ ບອກພິກສຸຊື່(ສັງຂຣັກຂິຕ)ນີ້ວ່າ 'ຈົ່ງລັກຊັພຍ໌ນີ້ມາ" ດັ່ງນີ້ ຕ້ອງອາບັຕິທຸກກົຕ ພິກສຸຜູ້ຮັບຄຳສັ່ງໄປບອກພິກສຸຮູບອື່ນ ຕ້ອງອາບັຕິທຸກກົຕ ພິກສຸຜູ້ລັກຮັບຄຳສັ່ງ ຕ້ອງອາບັຕິທຸກກົຕ ພິກສຸຜູ້ລັກ ລັກຊັພຍ໌ນັ້ນມາໄດ້ ພິກສຸຜູ້ສັ່ງຄັ້ງທຳອິດ ບໍ່ຕ້ອງອາບັຕິ ພິກສຸຜູ້ສັ່ງຕໍ່ແລະພິກສຸຜູ້ລັກ ຕ້ອງ

ອາບັຕິປາຣາຊິກ
ພິກສຸສັ່ງພິກສຸວ່າ "ຈົ່ງລັກຊັພຍ໌ນີ້ມາ" ຕ້ອງອາບັຕິທຸກກົຕ ພິກສຸຜູ້ຮັບຄຳສັ່ງໄປແລ້ວ ກັບມາບອກວ່າ "ຜູ້ຂ້າບໍ່ສາມາດລັກຊັພຍ໌ນັ້ນໄດ້" ຜູ້ສັ່ງຈຶ່ງສັ່ງອີກວ່າ "ຈົ່ງລັກຊັພຍ໌ນັ້ນໃນເວລາທີ່ທ່ານສາມາດຈະລັກໄດ້" ຕ້ອງອາບັຕິທຸກກົຕ ພິກສຸຜູ້ຮັບຄຳສັ່ງລັກຊັພຍ໌ນັ້ນມາໄດ້ ຕ້ອງອາບັຕິປາຣາຊິກທັງ ໒ ຮູບ
ພິກສຸສັ່ງພິກສຸວ່າ "ຈົ່ງລັກຊັພຍ໌ນີ້ມາ" ຕ້ອງອາບັຕິທຸກກົຕ ທ່ານສັ່ງແລ້ວເກີດຄວາມເດືອດຮ້ອນໃຈແຕ່ບໍ່ໄດ້ ກ່າວໃຫ້ຜູ້ຮັບຄຳສັ່ງໄດ້ຍິນວ່າ "ຢ່າລັກ" ພິກສຸຜູ້ຮັບຄຳສັ່ງລັກຊັພຍ໌ນັ້ນມາໄດ້ ຕ້ອງອາບັຕິປາຣາຊິກທັງ ໒ ຮູບ
ພິກສຸສັ່ງພິກສຸວ່າ "ຈົ່ງລັກຊັພຍ໌ນີ້ມາ" ຕ້ອງອາບັຕິທຸກກົຕ ທ່ານສັ່ງແລ້ວເກີດຄວາມເດືອດຮ້ອນໃຈຈຶ່ງກ່າວໃຫ້ໄດ້ຍິນວ່າ "ຢ່າລັກ" ແຕ່ພິກສຸຜູ້ຮັບຄຳສັ່ງກ່າວວ່າ "ທ່ານສັ່ງຂະນ້ອຍແລ້ວ" ລັກຊັພຍ໌ນັ້ນມາໄດ້ ພິກສຸຜູ້ສັ່ງບໍ່ຕ້ອງອາບັຕິ ພິກສຸຜູ້ລັກ ຕ້ອງອາບັຕິປາຣາຊິກ
ພິກສຸສັ່ງພິກສຸວ່າ "ຈົ່ງລັກຊັພຍ໌ນີ້ມາ" ຕ້ອງອາບັຕິທຸກກົຕ ທ່ານສັ່ງແລ້ວເກີດຄວາມເດືອດຮ້ອນໃຈຈຶ່ງກ່າວໃຫ້ຜູ້ຮັບຄຳສັ່ງໄດ້ຍິນວ່າ "ຢ່າລັກ" ພິກສຸຜູ້ຮັບຄຳສັ່ງນັ້ນຮັບວ່າ "ດີລະ" ຈຶ່ງງົດເວັ້ນ ບໍ່ຕ້ອງອາບັຕິທັງ ໒ ຮູບ

ອົງຄ໌ແຫ່ງປາຣາຊິກສິກຂາບົທທີ ໒

[໑໒໔] ພິກສຸຜູ້ຖືເອົາຂອງທີ່ເຂົາບໍ່ໄດ້ໃຫ້ ຕ້ອງອາບັຕິປາຣາຊິກ ດ້ວຍອາການ ໕ ຢ່າງ ຄື
໑. ຊັພຍ໌ມີຜູ້ຄອບຄອງ
໒. ສຳຄັນວ່າເປັນຊັພຍ໌ທີ່ມີຜູ້ຄອບຄອງ
໓. ຊັພຍ໌ມີຄ່າມາກ ຣາຄາ ໕ ມາສົກ ຫລືເກີນກວ່າ ໕ ມາສົກ
໔. ມີໄຖຍຈິຕປາກົດ
໕. ພິກສຸຈັບຕ້ອງ ຕ້ອງອາບັຕິທຸກກົຕ ເຮັດໃຫ້ໄຫວ ຕ້ອງອາບັຕິຖຸລລັຈຈັຍ ເຮັດໃຫ້ເຄື່ອນທີ່ຕ້ອງອາບັຕິປາຣາຊິກ

[໑໒໓] ພິກສຸຜູ້ຖືເອົາຂອງທີ່ເຂົາບໍ່ໄດ້ໃຫ້ ຕ້ອງອາບັຕິຖຸລລັຈຈັຍ ດ້ວຍອາການ ໕ ຢ່າງ ຄື
໑. ຊັພຍ໌ມີຜູ້ຄອບຄອງ

໒. ສຳຄັນວ່າເປັນຊັພຍ໌ທີ່ມີຜູ້ຄອບຄອງ
໓. ຊັພຍ໌ມີຄ່ານ້ອຍ ຣາຄາເກີນ ໑ ມາສກ ຫລືນ້ອຍກວ່າ ໕ ມາສກ
໔. ມີໄຖຍຈິຕປາກົດ
໕. ພິກສຸຈັບຕ້ອງ ຕ້ອງອາບັຕິທຸກກົດ ເຮັດໃຫ້ໄຫວ ຕ້ອງອາບັຕິທຸກກົດ ເຮັດໃຫ້ເຄື່ອນທີ່ຕ້ອງອາບັຕິຖຸລລັຈຈັຍ

[໑໘໔] ພິກສຸຜູ້ຖືເອົາຂອງທີ່ເຂົາບໍ່ໄດ້ໃຫ້ ຕ້ອງອາບັຕິທຸກກົດ ດ້ວຍອາການ ໕ ຢ່າງ ຄື
໑. ຊັພຍ໌ມີຜູ້ຄອບຄອງ
໒. ສຳຄັນວ່າເປັນຊັພຍ໌ທີ່ມີຜູ້ຄອບຄອງ
໓. ຊັພຍ໌ມີຄ່ານ້ອຍ ຣາຄາ ໑ ມາສກ ຫລືນ້ອຍກວ່າ ໑ ມາສກ
໔. ມີໄຖຍຈິຕປາກົດ
໕. ພິກສຸຈັບຕ້ອງ ຕ້ອງອາບັຕິທຸກກົດ ເຮັດໃຫ້ໄຫວ ຕ້ອງອາບັຕິທຸກກົດ ເຮັດໃຫ້ເຄື່ອນທີ່ຕ້ອງອາບັຕິທຸກກົດ

[໑໘໕] ພິກສຸຜູ້ຖືເອົາຂອງທີ່ເຂົາບໍ່ໄດ້ໃຫ້ ຕ້ອງອາບັຕິປາຣາຊິກ ດ້ວຍອາການ ໖ ຢ່າງ ຄື
໑. ສຳຄັນວ່າບໍ່ແມ່ນຂອງຂອງຕົນ
໒. ບໍ່ແມ່ນຖືເອົາດ້ວຍວິສາສະ
໓. ບໍ່ແມ່ນເປັນຂອງຂໍຢືມ
໔. ຊັພຍ໌ມີຄ່າມາກ ຣາຄາ ໕ ມາສກ ຫລືເກີນກວ່າ ໕ ມາສກ
໕. ມີໄຖຍຈິຕປາກົດ
໖. ພິກສຸຈັບຕ້ອງ ຕ້ອງອາບັຕິທຸກກົດ ເຮັດໃຫ້ໄຫວ ຕ້ອງອາບັຕິຖຸລລັຈຈັຍ ເຮັດໃຫ້ເຄື່ອນທີ່ຕ້ອງອາບັຕິປາຣາຊິກ

[໑໘໖] ພິກສຸຜູ້ຖືເອົາຂອງທີ່ເຂົາບໍ່ໄດ້ໃຫ້ ຕ້ອງອາບັຕິຖຸລລັຈຈັຍ ດ້ວຍອາການ ໖ ຢ່າງ ຄື
໑. ສຳຄັນວ່າບໍ່ແມ່ນຂອງຂອງຕົນ

໒. ບໍ່ແມ່ນຖືເອົາດ້ວຍວິສາສະ
໓. ບໍ່ແມ່ນເປັນຂອງຂໍຢືມ
໔. ຊັພຍ໌ມີຄ່ານ້ອຍ ຣາຄາເກີນ ໑ ມາສກ ຫລືນ້ອຍກວ່າ ໕ ມາສກ
໕. ມີໄຖຍຈິຕປາກົດ
໖. ພິກສຸຈັບຕ້ອງ ຕ້ອງອາບັຕິທຸກກຕ ເຮັດໃຫ້ໄຫວ ຕ້ອງອາບັຕິທຸກກຕ ເຮັດໃຫ້ເຄື່ອນທີ່ຕ້ອງອາບັຕິຖຸລລັຈຈັຍ

[໑໔໗] ພິກສຸຜູ້ຖືເອົາຂອງທີ່ເຂົາບໍ່ໄດ້ໃຫ້ ຕ້ອງອາບັຕິທຸກກຕ ດ້ວຍອາການ ໖ ຢ່າງ ຄື
໑. ສຳຄັນວ່າບໍ່ແມ່ນຂອງຂອງຕົນ
໒. ບໍ່ແມ່ນຖືເອົາດ້ວຍວິສາສະ
໓. ບໍ່ແມ່ນເປັນຂອງຂໍຢືມ
໔. ຊັພຍ໌ມີຄ່ານ້ອຍ ຣາຄາ ໑ ມາສກ ຫລືນ້ອຍກວ່າ ໑ ມາສກ
໕. ມີໄຖຍຈິຕປາກົດ
໖. ພິກສຸຈັບຕ້ອງ ຕ້ອງອາບັຕິທຸກກຕ ເຮັດໃຫ້ໄຫວ ຕ້ອງອາບັຕິທຸກກຕ ເຮັດໃຫ້ເຄື່ອນທີ່ຕ້ອງອາບັຕິທຸກກຕ

[໑໔໘] ພິກສຸຜູ້ຖືເອົາຂອງທີ່ເຂົາບໍ່ໄດ້ໃຫ້ ຕ້ອງອາບັຕິທຸກກຕ ດ້ວຍອາການ ໕ ຢ່າງ ຄື
໑. ບໍ່ແມ່ນຊັພຍ໌ທີ່ມີຜູ້ຄອບຄອງ
໒. ສຳຄັນວ່າເປັນຊັພຍ໌ທີ່ມີຜູ້ຄອບຄອງ
໓. ຊັພຍ໌ມີຄ່າມາກ ຣາຄາ ໕ ມາສກ ຫລືເກີນກວ່າ ໕ ມາສກ
໔. ມີໄຖຍຈິຕປາກົດ
໕. ພິກສຸຈັບຕ້ອງ ຕ້ອງອາບັຕິທຸກກຕ ເຮັດໃຫ້ໄຫວ ຕ້ອງອາບັຕິທຸກກຕ ເຮັດໃຫ້ເຄື່ອນທີ່ຕ້ອງອາບັຕິທຸກກຕ

[໑໔໙] ພິກສຸຜູ້ຖືເອົາຂອງທີ່ເຂົາບໍ່ໄດ້ໃຫ້ ຕ້ອງອາບັຕິທຸກກຕ ດ້ວຍອາການ ໕ ຢ່າງ ຄື
໑. ບໍ່ແມ່ນຊັພຍ໌ທີ່ມີຜູ້ຄອບຄອງ
໒. ສຳຄັນວ່າເປັນຊັພຍ໌ທີ່ມີຜູ້ຄອບຄອງ

໓. ຊັພຍ໌ມີຄ່ານ້ອຍ ຣາຄາເກີນ ໑ ມາສກ ຫລືນ້ອຍກວ່າ ໕ ມາສກ

໔. ມີໄຖຍຈິຕປາກົດ

໕. ພິກສຸຈັບຕ້ອງ ຕ້ອງອາບັຕິທຸກກຕ ເຮັດໃຫ້ໄຫວ ຕ້ອງອາບັຕິທຸກກຕ ເຮັດໃຫ້ເຄື່ອນທີ່ຕ້ອງອາບັຕິທຸກກຕ

[໑໓໐] ພິກສຸຜູ້ຖືເອົາຂອງທີ່ເຂົາບໍ່ໄດ້ໃຫ້ ຕ້ອງອາບັຕິທຸກກຕ ດ້ວຍອາການ ໕ ຢ່າງ ຄື

໑. ບໍ່ແມ່ນຊັພຍ໌ທີ່ມີຜູ້ຄອບຄອງ

໒. ສຳຄັນວ່າເປັນຊັພຍ໌ທີ່ມີຜູ້ຄອບຄອງ

໓. ຊັພຍ໌ມີຄ່ານ້ອຍ ຣາຄາ ໑ ມາສກ ຫລືນ້ອຍກວ່າ ໑ ມາສກ

໔. ມີໄຖຍຈິຕປາກົດ

໕. ພິກສຸຈັບຕ້ອງ ຕ້ອງອາບັຕິທຸກກຕ ເຮັດໃຫ້ໄຫວ ຕ້ອງອາບັຕິທຸກກຕ ເຮັດໃຫ້ເຄື່ອນທີ່ຕ້ອງອາບັຕິທຸກກຕ

## ອນາປັຕຕິວາຣ
## ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໑໓໑] ໑. ພິກສຸສຳຄັນວ່າເປັນຂອງຂອງຕົນ

໒. ພິກສຸຖືເອົາດ້ວຍວິສາສະ

໓. ພິກສຸຖືເອົາເປັນຂອງຂໍຢືມ

໔. ພິກສຸຖືເອົາຊັພຍ໌ທີ່ເຜດຄອບຄອງ

໕. ພິກສຸຖືເອົາຊັພຍ໌ທີ່ສັຕວ໌ເດັຽຣະສານຄອບຄອງ

໖. ພິກສຸສຳຄັນວ່າເປັນຂອງບັງສຸກຸລ

໗. ພິກສຸວິກົລຈິຕ

໘. ພິກສຸມີຈິຕປັ່ນປ່ວງ

໙. ພິກສຸກະວົນກະວາຍເພາະເວທນາ

໑໐. ພິກສຸຕົ້ນບັນຍັຕ

ປຖົມພານວາຣ ໃນອທິນນາທານສິກຂາບົທ ຈົບ

□□□□□□ ສົມ ສັກ □□□□□□

# ພຣະວິນັຍປິຏົກ ມຫາວິພັງຄ໌ [໑. ປາຣາຊິກກັນ຺ຑ໌] ປາຣາຊິກສິກຂາບົທທີ ໔ ຄາຖາຣວມວິນີຕ ວັຕຖຸ

## ຄາຖາຣວມວິນີຕວັຕຖຸ

## ເຣື້ອງທີ່ຊົງວິນິຈສັ຺ຍແລ້ວ

ເຣື້ອງຊ່າງຍ້ອມ ໕ ເຣື້ອງ □ເຣື້ອງຜ້າປູຕຽງ ໔ ເຣື້ອງ □ເຣື້ອງກາງຄືນ ໕ ເຣື້ອງ □ເຣື້ອງຊັພຍ໌ ທີ່ພິກສ຺ຸນຳໄປແຕ່ຜູ້ດຽວ ໑໑ ເຣື້ອງ □ເຣື້ອງຕອບຕາມຄຳຖາມນຳ ໕ ເຣື້ອງ □ເຣື້ອງລົມ ໔ ເຣື້ອງ □ເຣື້ອງສົ຺ພທີ່ຍັງສົດ ໑ ເຣື້ອງ □ເຣື້ອງສັບປ່ຽນສລາກ ໑ ເຣື້ອງ □ເຣື້ອງເຮືອນໄຟ ໑ ເຣື້ອງ □ເຣື້ອງເນື້ອເດນສັຕວ໌ ໕ ເຣື້ອງ

□ເຣື້ອງບໍ່ມີມູລ ໕ ເຣື້ອງ □ໃນສມັຍເຂົ້າຍາກຫມາກແພງ ມີ ໕ ເຣື້ອງ ຄື ເຣື້ອງເຂົ້າສຸກ ໑ ເຣື້ອງ □ເຣື້ອງເນື້ອ ໑ ເຣື້ອງ □ເຣື້ອງຂນົມ ໑ ເຣື້ອງ □ເຣື້ອງນ້ຳຕາລກ້ອນ ໑ ເຣື້ອງ □ເຣື້ອງຂນົມຕົ້ມ ໑ ເຣື້ອງ □ເຣື້ອງບໍຣິຂາຣ ໕ ເຣື້ອງ □ເຣື້ອງຖົງ ໑ ເຣື້ອງ □ເຣື້ອງເສື່ອ ໑ ເຣື້ອງ □ເຣື້ອງຣາວຈີວອນ ໑ ເຣື້ອງ □ເຣື້ອງບໍ່ອອກໄປ ໑ ເຣື້ອງ □ເຣື້ອງຖືວິສາສະສັ຺ນ ຂອງຄົງວ ໑ ເຣື້ອງ  □ເຣື້ອງສຳຄັນວ່າເປັນຂອງຂອງຕົນ ໔ ເຣື້ອງ □ເຣື້ອງບໍ່ໄດ້ລັກ ໆ ເຣື້ອງ □ເຣື້ອງລັກ ໆ ເຣື້ອງ □ເຣື້ອງລັກຂອງສົງຂ໌ ໆ ເຣື້ອງ □ເຣື້ອງລັກດອກໄມ້ ໔ ເຣື້ອງ □ເຣື້ອງ ເວົ້າຕາມຄຳບອກ ໓ ເຣື້ອງ □ເຣື້ອງນຳແກ້ວມນີຜ່ານດ່ານພາສີ ໓ ເຣື້ອງ □ເຣື້ອງປ່ອຍຫມູ ໔ ເຣື້ອງ □ເຣື້ອງປ່ອຍເນື້ອ ໔ ເຣື້ອງ □ເຣື້ອງປ່ອຍປາ ໔ ເຣື້ອງ □ເຣື້ອງກົ້ງຊັພຍ໌ໃນຍານ ໑ ເຣື້ອງ □ເຣື້ອງຊິ້ນເນື້ອ ໔ ເຣື້ອງ □ເຣື້ອງໄມ້ ໔ ເຣື້ອງ □ເຣື້ອງຜ້າບັງສຸກຸລ ໑ ເຣື້ອງ □ເຣື້ອງ ຂ້າມນ້ຳ ໔ ເຣື້ອງ □ເຣື້ອງສັ຺ນທິລະນ້ອຍ ໑ ເຣື້ອງ □ເຣື້ອງຊັກຊວນກັນໄປລັກ ໔ ເຣື້ອງ □ເຣື້ອງກຳມືທີ່ກຸງສາວັຕຖີ ໔ ເຣື້ອງ □ເຣື້ອງເນື້ອເປັນເດນ ໔ ເຣື້ອງ □ເຣື້ອງຫຍ້າ ໔ ເຣື້ອງ □ເຣື້ອງໃຫ້ແບ່ງຂອງສົງຂ໌ ໆ ເຣື້ອງ □ເຣື້ອງບໍ່ແມ່ນເຈົ້າຂອງ ໆ ເຣື້ອງ □ເຣື້ອງຍືມໄມ້ຂອງສົງຂ໌ ໑ ເຣື້ອງ □ເຣື້ອງລັກນ້ຳຂອງສົງຂ໌ ໑ ເຣື້ອງ □ເຣື້ອງລັກດິນຂອງສົງຂ໌ ໑ ເຣື້ອງ □ເຣື້ອງ ລັກຫຍ້າຂອງສົງຂ໌ ໔ ເຣື້ອງ □ເຣື້ອງລັກເສນາສນະຂອງສົງຂ໌ ໆ ເຣື້ອງ □ເຣື້ອງຂອງມີເຈົ້າ ຂອງບໍ່ຄວຣນຳໄປໃຊ້ ໑ ເຣື້ອງ □ເຣື້ອງຂອງມີເຈົ້າຂອງຄວຣຂໍຍືມ ໑ ເຣື້ອງ □ເຣື້ອງພິກສ຺ຸນີ

ຊາວກຸງຈັມປາ ໑ ເຣື່ອງ ▫ເຣື່ອງພິກສຸນີຊາວກຸງຣາຊຄຶຫ໌ ໑ ເຣື່ອງ ▫ເຣື່ອງພຣະວັຊຊຸກະຊາວກຸງເວສາລີ ໑ ເຣື່ອງ ▫ເຣື່ອງທາຣົກຊາວກຸງພາຣານສີ ໑ ເຣື່ອງ ▫ເຣື່ອງພິກສຸຊາວກຸງໂກສັມພີ ໑ ເຣື່ອງ ▫ເຣື່ອງສັທຫິວິຫາຣິກຂອງພຣະທັຣຫິກະກຸງສາຄລະ ໑ ເຣື່ອງ

## ວິນີຕວັຕຖຸ
## ເຣື່ອງຊ່າງຍ້ອມ ໕ ເຣື່ອງ

[໑໖໔] ສມັຍນັ້ນ ພວກພິກສຸສັພພັຄຄີຍ໌ໄປທີ່ລານຕາກຜ້າຂອງຊ່າງຍ້ອມ ໄດ້ລັກຫໍ່ຜ້າຂອງຊ່າງຍ້ອມ ແລ້ວເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ພວກທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໑)

ສມັຍນັ້ນ ພິກສຸຮູບນຶ່ງໄປທີ່ລານຕາກຜ້າຂອງຊ່າງຍ້ອມ ພົບຜ້າມີຣາຄາມາກ ເກີດໄຖຍຈິຕຂຶ້ນມາ ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ພຽງແຕ່ຄິດ ບໍ່ຕ້ອງອາບັຕິ" (ເຣື່ອງທີ ໒)

ສມັຍນັ້ນ ພິກສຸຮູບນຶ່ງໄປທີ່ລານຕາກຜ້າຂອງຊ່າງຍ້ອມ ພົບຜ້າມີຣາຄາມາກ ມີໄຖຍຈິຕຈັບຜ້າຜືນນັ້ນ ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງ ຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິທຸກກຕ" (ເຣື່ອງທີ ໓)

ສມັຍນັ້ນ ພິກສຸຮູບນຶ່ງໄປທີ່ລານຕາກຜ້າຂອງຊ່າງຍ້ອມ ພົບຜ້າມີຣາຄາມາກ ມີໄຖຍຈິຕ ເຮັດໃຫ້ຜ້າໄຫວ ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ" (ເຣື່ອງທີ ໔)

ສມັຍນັ້ນ ພິກສຸຮູບນຶ່ງໄປທີ່ລານຕາກຜ້າຂອງຊ່າງຍ້ອມ ພົບຜ້າມີຣາຄາມາກ ມີໄຖຍຈິຕເຮັດໃຫ້ຜ້າເຄື່ອນທີ່ ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໕)

## ເຣື່ອງຜ້າປູຕຽງ ໔ ເຣື່ອງ

[໑໘໓] ສມັຍນັ້ນ ພິກສຸຜູ້ທຽວບິນທຸບາຕເປັນວັຕຣຮູບນຶ່ງພົບຜ້າປູຕຽງມີຣາຄາມາກ ເກີດໄຖຍຈິຕ ຂຶ້ນມາ ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລ ພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ພຽງແຕ່ຄິດບໍ່ຕ້ອງອາບັຕິ" (ເຣື້ອງທີ ໕)

ສມັຍນັ້ນ ພິກສຸຜູ້ທຽວບິນທຸບາຕເປັນວັຕຣຮູບນຶ່ງພົບຜ້າປູຕຽງມີຣາຄາມາກ ມີໄຖຍຈິຕຈັບຕ້ອງ ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີ ພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິທຸກ ກຕ" (ເຣື້ອງທີ ໗)

ສມັຍນັ້ນ ພິກສຸຮູບນຶ່ງພົບຜ້າປູຕຽງມີຣາຄາມາກ ມີໄຖຍຈິຕ ເຮັດໃຫ້ຜ້າໄຫວ ແລ້ວເກີດຄວາມ ກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ" (ເຣື້ອງ ທີ ໘)

ສມັຍນັ້ນ ພິກສຸຮູບນຶ່ງພົບຜ້າປູຕຽງມີຣາຄາມາກ ມີໄຖຍຈິຕ ເຮັດໃຫ້ຜ້າເຄື່ອນທີ່ແລ້ວເກີດຄວາມ ກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໙)

## ເຣື້ອງກາງຄືນ ໕ ເຣື້ອງ

[໑໘໔] ສມັຍນັ້ນ ພິກສຸຮູບນຶ່ງພົບສິ່ງຂອງຕອນກາງເວັນ ໄດ້ທຳເຄື່ອງຫມາຍໄວ້ດ້ວຍຕັ້ງໃຈວ່າ ຈະລັກຕອນກາງຄືນ ທ່ານສຳຄັນສິ່ງຂອງນັ້ນວ່າເປັນສິ່ງຂອງນັ້ນ ຈຶ່ງໄດ້ລັກຂອງນັ້ນມາ ແລ້ວເກີດ ຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄ ໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໑໐)

ສມັຍນັ້ນ ພິກສຸຮູບນຶ່ງພົບສິ່ງຂອງຕອນກາງເວັນ ໄດ້ທຳເຄື່ອງຫມາຍໄວ້ ດ້ວຍຕັ້ງໃຈວ່າ ຈະລັກ ຕອນກາງຄືນ ທ່ານສຳຄັນສິ່ງຂອງນັ້ນວ່າເປັນສິ່ງຂອງນັ້ນ ແຕ່ໄດ້ລັກສິ່ງຂອງອື່ນມາ ແລ້ວເກີດ ຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄ ໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໑໑)

ສມັຍນັ້ນ ພິກສຸຮູບນຶ່ງພົບສິ່ງຂອງຕອນກາງເວັນ ໄດ້ທຳເຄື່ອງຫມາຍໄວ້ ດ້ວຍຕັ້ງໃຈວ່າຈະລັກ ຕອນກາງຄືນ ທ່ານສຳຄັນສິ່ງຂອງນັ້ນວ່າເປັນສິ່ງຂອງອື່ນ ແຕ່ໄດ້ລັກສິ່ງຂອງນັ້ນມາ ແລ້ວເກີດ

ຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄ
ໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໑໔)
ສມັຍນັ້ນ ພິກສຸຮູບນຶ່ງພົບສິ່ງຂອງຕອນກາງເວັນ ໄດ້ທຳເຄື່ອງຫມາຍໄວ້ດ້ວຍຕັ້ງໃຈວ່າ ຈະລັກ
ຕອນກາງຄືນ ທ່ານສຳຄັນສິ່ງຂອງນັ້ນວ່າເປັນສິ່ງຂອງອື່ນ ໄດ້ລັກສິ່ງຂອງອື່ນມາ ແລ້ວເກີດຄວາມ
ກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົ
ງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໑໓ )
ສມັຍນັ້ນ ພິກສຸຮູບນຶ່ງພົບສິ່ງຂອງຕອນກາງເວັນ ໄດ້ທຳເຄື່ອງຫມາຍໄວ້ດ້ວຍຕັ້ງໃຈວ່າ ຈະລັກ
ຕອນກາງຄືນ ທ່ານສຳຄັນສິ່ງຂອງນັ້ນວ່າເປັນສິ່ງຂອງນັ້ນ ແຕ່ໄດ້ລັກສິ່ງຂອງຂອງຕົນເອງ ແລ້ວ
ເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະ
ພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິທຸກກົຕ"
(ເຣື້ອງທີ ໑໔)

## ເຣື້ອງຊັພຍ໌ທີ່ພິກສຸນຳໄປແຕ່ຜູ້ດຽວ ໑໑ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງນຳສິ່ງຂອງຂອງຜູ້ອື່ນໄປ ມີໄຖຍຈິຕ ຈັບຕ້ອງສິ່ງຂອງທີ່ຢູ່ເທິງສີສະຕົນເອງ
ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີ
ພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິທຸກ
ກົຕ" (ເຣື້ອງທີ ໑໕)

ສມັຍນັ້ນ ພິກສຸຮູບນຶ່ງນຳສິ່ງຂອງຂອງຜູ້ອື່ນໄປ ມີໄຖຍຈິຕ ທຳສິ່ງຂອງທີ່ຢູ່ເທິງສີສະຕົນເອງໃຫ້
ໄຫວ ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລ
ພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງ
ອາບັຕິຖຸລລັຈຈັຍ" (ເຣື້ອງທີ ໑໖)
ສມັຍນັ້ນ ພິກສຸຮູບນຶ່ງນຳສິ່ງຂອງຂອງຜູ້ອື່ນໄປ ມີໄຖຍຈິຕ ລົດສິ່ງຂອງທີ່ຢູ່ເທິງສີສະຕົນເອງລົງມາ
ທີ່ໄຫລ່ ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ຈຶ່ງນຳເຣື້ອງນີ້ໄປຂາບທູລ
ພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ
໑໗)
ສມັຍນັ້ນ ພິກສຸຮູບນຶ່ງນຳສິ່ງຂອງຂອງຜູ້ອື່ນໄປ ມີໄຖຍຈິຕ ຈັບຕ້ອງສິ່ງຂອງທີ່ຢູ່ເທິງໄຫລ່ ແລ້ວ

ເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະ ອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິທຸກກຕ" (ເຣື້ອງທີ ໑໗)

ສມັຍນັ້ນ ພິກສຸຮູບນຶ່ງນຳສິ່ງຂອງຂອງຜູ້ອື່ນໄປ ມີໄຖຍຈິຕ ທຳສິ່ງຂອງທີ່ຢູ່ທີ່ໄຫລ່ຕົນເອງໃຫ້ໄຫວ ແລ້ວເກີດຄວາມຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ" (ເຣື້ອງທີ ໑໘)

ສມັຍນັ້ນ ພິກສຸຮູບນຶ່ງນຳສິ່ງຂອງຂອງຜູ້ອື່ນໄປ ມີໄຖຍຈິຕ ລົດສິ່ງຂອງທີ່ຢູ່ທີ່ໄຫລ່ລົງມາເຖິງຣະດັບແອວ ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໔໐)

ສມັຍນັ້ນ ພິກສຸຮູບນຶ່ງນຳສິ່ງຂອງຂອງຜູ້ອື່ນໄປ ມີໄຖຍຈິຕ ຈັບຕ້ອງສິ່ງຂອງທີ່ຢູ່ທີ່ແອວ ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິທຸກກຕ" (ເຣື້ອງທີ ໔໑)

ສມັຍນັ້ນ ພິກສຸຮູບນຶ່ງນຳສິ່ງຂອງຂອງຜູ້ອື່ນໄປ ມີໄຖຍຈິຕ ທຳສິ່ງຂອງຊຶ່ງຢູ່ທີ່ແອວໃຫ້ໄຫວ ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະ ອົງຄ໌ ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ" (ເຣື້ອງທີ ໔໒)

ສມັຍນັ້ນ ພິກສຸຮູບນຶ່ງນຳສິ່ງຂອງຂອງຜູ້ອື່ນໄປ ມີໄຖຍຈິຕ ເອົາມືຫຍິບສິ່ງຂອງຊຶ່ງຢູ່ທີ່ແອວຫິ້ວໄປ ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໔໓)

ສມັຍນັ້ນ ພິກສຸຮູບນຶ່ງນຳສິ່ງຂອງຂອງຜູ້ອື່ນໄປ ມີໄຖຍຈິຕ ເອົາສິ່ງຂອງທີ່ມືວາງລົງທີ່ພື້ນ ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະ ອົງຄ໌ ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໔໔)

ສມັຍນັ້ນ ພິກສຸຮູບນຶ່ງ ນຳສິ່ງຂອງຂອງຜູ້ອື່ນໄປ ມີໄຖຍຈິຕຫຍິບສິ່ງຂອງຂຶ້ນຈາກພື້ນດິນ ແລ້ວ

ເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະ ອົງຄ໌ ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໔໕)

## ເຣື້ອງຕອບຕາມຄຳຖາມນຳ ໕ ເຣື້ອງ

[໑໖໕] ສມັຍນັ້ນ ພິກສຸຣູບນຶ່ງຜຶ່ງຈີວອນໄວ້ກາງແຈ້ງແລ້ວເຂົ້າໄປວິຫາຣ ພິກສຸອີກຣູບນຶ່ງເກັບຈີວອນນັ້ນດ້ວຍຫວັງວ່າ ຈະບໍ່ໃຫ້ຈີວອນຫາຍ ພິກສຸເຈົ້າຂອງຈີວອນອອກມາ ຖາມພິກສຸຣູບທີ່ເກັບໄປນັ້ນວ່າ "ທ່ານ ຈີວອນຂອງຂະນ້ອຍໃຜ້ໄປ" ພິກສຸຣູບນັ້ນຕອບວ່າ "ຂະນ້ອຍລັກໄປ" ພິກສຸເຈົ້າຂອງຈີວອນຈັບເອົາພິກສຸຣູບທີ່ນຳຈີວອນໄປກ່າວວ່າ "ທ່ານບໍ່ເປັນພຣະ" ພິກສຸຣູບທີ່ນຳຈີວອນໄປເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາ ຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດ ຢ່າງໃດ" "ຂ້າພຣະພຸທທເຈົ້າຕອບໄປຕາມຄຳຖາມນຳ ພຣະພຸທທເຈົ້າຂ້າ" "ພິກສຸ ບໍ່ຕ້ອງອາບັຕິ ເພາະຕອບ ຕາມຄຳຖາມນຳ" (ເຣື້ອງທີ ໔໖)

ສມັຍນັ້ນ ພິກສຸຣູບນຶ່ງພາດຈີວອນໄວ້ເທິງຕັ່ງແລ້ວເຂົ້າໄປວິຫາຣ ພິກສຸອີກຣູບນຶ່ງເກັບຈີວອນນັ້ນດ້ວຍຫວັງວ່າຈະບໍ່ໃຫ້ຈີວອນຫາຍ ພິກສຸເຈົ້າຂອງຈີວອນອອກມາ ຖາມພິກສຸຣູບທີ່ເກັບໄປນັ້ນວ່າ "ທ່ານ ຈີວອນຂອງຂະນ້ອຍ ໃຜ້ໄປ" ພິກສຸຣູບນັ້ນຕອບວ່າ "ຂະນ້ອຍລັກໄປ" ພິກສຸເຈົ້າຂອງຈີວອນຈັບເອົາພິກສຸຣູບທີ່ນຳຈີວອນໄປກ່າວວ່າ "ທ່ານບໍ່ເປັນພຣະ" ພິກສຸຣູບທີ່ນຳຈີວອນໄປເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກ ຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ" "ຂ້າພຣະພຸທທເຈົ້າຕອບໄປຕາມຄຳຖາມນຳ ພຣະພຸທທເຈົ້າຂ້າ" "ພິກສຸ ບໍ່ຕ້ອງອາບັຕິ ເພາະຕອບຕາມ
ຄຳຖາມນຳ" (ເຣື້ອງທີ ໔໗)
ສມັຍນັ້ນ ພິກສຸຣູບນຶ່ງພາດຜ້າປູນັ່ງໄວ້ເທິງຕັ່ງ ພິກສຸອີກຣູບນຶ່ງເກັບຜ້າປູນັ່ງນັ້ນດ້ວຍຫວັງວ່າ ຈະບໍ່ໃຫ້ຜ້າປູນັ່ງຫາຍ ພິກສຸເຈົ້າຂອງຜ້າປູນັ່ງອອກມາ ຖາມພິກສຸຣູບທີ່ເກັບໄປນັ້ນວ່າ "ທ່ານ ຜ້າປູນັ່ງຂອງຂະນ້ອຍ ໃຜ້ໄປ" ພິກສຸຣູບນັ້ນຕອບວ່າ "ຂະນ້ອຍລັກໄປ" ພິກສຸເຈົ້າຂອງຜ້າປູນັ່ງຈັບເອົາພິກສຸຣູບທີ່ນຳຜ້າປູນັ່ງໄປກ່າວວ່າ "ທ່ານບໍ່ເປັນພຣະ" ພິກສຸຣູບທີ່ນຳຜ້າປູນັ່ງໄປເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ" "ຂ້າ

ພຣະພຸທທເຈົ້າຕອບໄປຕາມຄຳຖາມນຳ ພຣະພຸທທເຈົ້າຂ້າ" "ພິກສຸ ບໍ່ຕ້ອງອາບັຕິ ເພາະຕອບຕາມຄຳຖາມນຳ" (ເຣື່ອງທີ ໔໗)

ສມັຍນັ້ນ ພິກສຸຮູບນຶ່ງວາງບາຕຣໄວ້ໃຕ້ຕັ່ງແລ້ວເຂົ້າໄປວິຫາຣ ພິກສຸອີກຮູບນຶ່ງໄດ້ເກັບບາຕຣນັ້ນດ້ວຍຫວັງວ່າ ຈະບໍ່ໃຫ້ບາຕຣຫາຍ ພິກສຸເຈົ້າຂອງບາຕຣອອກມາຖາມພິກສຸຮູບທີ່ເກັບໄປນັ້ນວ່າ "ທ່ານ ບາຕຣຂອງຂະນ້ອຍ ໃຜ້ໄປ" ພິກສຸຮູບນັ້ນຕອບວ່າ "ຂະນ້ອຍລັກໄປ" ພິກສຸເຈົ້າຂອງບາຕຣຈັບເອົາພິກສຸຮູບທີ່ນຳບາຕຣໄປກ່າວວ່າ "ທ່ານບໍ່ເປັນພຣະ" ພິກສຸຮູບທີ່ນຳບາຕຣໄປເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ"

"ຂ້າພຣະພຸທທເຈົ້າຕອບໄປຕາມຄຳຖາມນຳ ພຣະພຸທທເຈົ້າຂ້າ" "ພິກສຸ ບໍ່ຕ້ອງອາບັຕິເພາະຕອບຕາມຄຳຖາມນຳ" (ເຣື່ອງທີ ໔໘)

ສມັຍນັ້ນ ພິກສຸນີຮູບນຶ່ງຜຶ່ງຈີວອນໄວ້ທີ່ຮົ້ວແລ້ວເຂົ້າໄປຍັງວິຫາຣ ພິກສຸນີອີກຮູບນຶ່ງເກັບຈີວອນນັ້ນດ້ວຍຫວັງວ່າ ຈະບໍ່ໃຫ້ຈີວອນຫາຍ ພິກສຸນີເຈົ້າຂອງຈີວອນອອກມາຖາມພິກສຸນີຮູປທີ່ເກັບໄປນັ້ນວ່າ "ທ່ານ ຈີວອນຂອງຂະນ້ອຍ ໃຜ້ໄປ" ພິກສຸນີຮູບນັ້ນຕອບວ່າ "ຂະນ້ອຍລັກໄປ" ພິກສຸນີເຈົ້າຂອງຈີວອນຈັບເອົາພິກສຸນີຮູປທີ່ນຳຈີວອນໄປກ່າວວ່າ "ທ່ານບໍ່ເປັນພຣະ" ພິກສຸນີຮູປທີ່ນຳຈີວອນໄປເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງບອກເຣື່ອງນີ້ແກ່ພິກສຸນີທັງຫລາຍ ພິກສຸນີທັງຫລາຍຈຶ່ງບອກແກ່ພິກສຸທັງຫລາຍ ພິກສຸທັງຫລາຍຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ບໍ່ຕ້ອງອາບັຕິເພາະຕອບຕາມຄຳຖາມນຳ" (ເຣື່ອງທີ ໕໐)

## ເຣື່ອງລົມ ໔ ເຣື່ອງ

[໑໕໓] ສມັຍນັ້ນ ພິກສຸຮູບນຶ່ງພົບຜ້າສາດົກຖືກລົມບ້າຫມູພັດມາ ຈຶ່ງເກັບໄວ້ດ້ວຍຕັ້ງໃຈຈະນຳຄືນເຈົ້າຂອງ ແຕ່ພວກເຈົ້າຂອງຜ້າກ່າວຫາທ່ານວ່າ "ທ່ານບໍ່ເປັນພຣະ" ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາ ຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ" "ຂ້າພຣະພຸທທເຈົ້າບໍ່ມີໄຖຍຈິຕ ພຣະພຸທທເຈົ້າຂ້າ" "ພິກສຸ ບໍ່ມີໄຖຍຈິຕ ບໍ່ຕ້ອງອາບັຕິ" (ເຣື່ອງທີ ໕໑)

ສມັຍນັ້ນ ພິກສຸຮູບນຶ່ງມີໄຖຍຈິຕ ຖືເອົາຜ້າໂພກຊຶ່ງຖືກລົມບ້າຫມູພັດມາ ດ້ວຍເກງວ່າ ເຈົ້າຂອງຜ້າຈະເຫັນເສັຽກ່ອນ ພວກເຈົ້າຂອງຜ້າກ່າວຫາທ່ານວ່າ "ທ່ານບໍ່ເປັນພຣະ" ທ່ານເກີດຄວາມກັງວົລໃຈ

ວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ" "ຂ້າພຣະພຸທທເຈົ້າມີໄຖຍຈິຕ ພຣະພຸທທເຈົ້າຂ້າ" "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໖໑)

## ເຣື້ອງສົບທີ່ຍັງສົດ ໑ ເຣື້ອງ

[໑໖໗] ສມັຍນັ້ນ ພິກສຸຮູບນຶ່ງໄປປ່າຊ້າ ຖືເອົາຜ້າບັງສຸກຸລທີ່ຊາກສົບຍັງສົດຊຶ່ງມີເຜດສິງຢູ່ໃນຮ່າງ ເຜດນັ້ນເວົ້າກັບພິກສຸນັ້ນວ່າ "ຢ່າເອົາຜ້າຂອງເຮົາໄປ" ພິກສຸບໍ່ໃສ່ໃຈຖືເອົາໄປ ທັນໃດນັ້ນ ຮ່າງນັ້ນລຸກຂຶ້ນຕິດຕາມພິກສຸໄປ ພິກສຸຮູບນັ້ນເຂົ້າໄປວິຫາຣແລ້ວປິດປະຕູເສັຽ ຮ່າງນັ້ນໄດ້ລົ້ມລົງທີ່ປະຕູນັ້ນເອງ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ອີກຢ່າງນຶ່ງ ພິກສຸທັງຫລາຍ ພິກສຸບໍ່ເພິງຖືເອົາ
ຜ້າບັງສຸກຸລໃນຊາກສົບທີ່ຍັງສົດ ພິກສຸໃດຖືເອົາ ຕ້ອງອາບັຕິທຸກກຕ" (ເຣື້ອງທີ ໖໖)

[໑໖໘] ສມັຍນັ້ນ ເມື່ອພິກສຸເຈົ້າຫນ້າທີ່ກຳລັງແຈກຈີວອນແກ່ສົງຄ໌ ພິກສຸຮູບນຶ່ງ ມີໄຖຍຈິຕໄດ້ສັບປ່ຽນສລາກຮັບຈີວອນໄປ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໖໔)

## ເຣື້ອງເຮືອນໄຟ ໑ ເຣື້ອງ

[໑໖໙] ສມັຍນັ້ນ ພຣະອານົນທ໌ສຳຄັນວ່າຜ້າອັນຕຣວາສກຂອງພິກສຸຮູບນຶ່ງໃນເຮືອນໄຟເປັນຂອງຕົນຈຶ່ງນຸ່ງ ພິກສຸຮູບທີ່ເປັນເຈົ້າຂອງຜ້າອັນຕຣວາສກກ່າວກັບທ່ານພຣະອານົນທ໌ວ່າ "ເປັນຫຍັງທ່ານຈຶ່ງເອົາຜ້າອັນຕຣາສກຂອງຂະນ້ອຍໄປນຸ່ງ" "ທ່ານ ຂະນ້ອຍສຳຄັນວ່າເປັນຂອງຂະນ້ອຍ" ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ພິກສຸສຳຄັນວ່າເປັນຂອງຕົນ ບໍ່ຕ້ອງອາບັຕິ" (ເຣື້ອງທີ ໖໕)

## ເຣື້ອງເນື້ອເດນສັຕວ໌ ໕ ເຣື້ອງ

[໑໔໐] ສມັຍນັ້ນ ພິກສຸຫລາຍຮູບລົງຈາກພູເຂົາຄິຊຸຢກູຕ ພົບເນື້ອເປັນເດນຂອງຣາຊສີຫ໌ ຈຶ່ງໃຊ້ໃຫ້ອນຸປສັມ ບັນເຮັດໃຫ້ສຸກແລ້ວສັນ ພວກທ່ານເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ພິກສຸສັນເນື້ອເປັນເດນຣາຊສີຫ໌ ບໍ່ຕ້ອງອາບັຕິ" (ເຣື້ອງທີ ໓໘)
ສມັຍນັ້ນ ພິກສຸຫລາຍຮູບລົງຈາກພູເຂົາຄິຊຸຢກູຕ ພົບເນື້ອເປັນເດນເສືອໂຄ່ງ ຈຶ່ງໃຊ້ໃຫ້ອນຸປສັມບັນເຮັດໃຫ້ສຸກແລ້ວສັນ ພວກທ່ານເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ພິກສຸສັນເນື້ອເປັນເດນເສືອໂຄ່ງ ບໍ່ຕ້ອງອາບັຕິ" (ເຣື້ອງທີ ໓໗)
ສມັຍນັ້ນ ພິກສຸຫລາຍຮູບລົງຈາກພູເຂົາຄິຊຸຢກູຕ ພົບເນື້ອເປັນເດນເສືອເຫລືອງ ຈຶ່ງໃຊ້ໃຫ້ອນຸປສັມບັນເຮັດໃຫ້ສຸກແລ້ວສັນ ພວກທ່ານເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ພິກສຸສັນເນື້ອເປັນເດນເສືອເຫລືອງ ບໍ່ຕ້ອງອາບັຕິ" (ເຣື້ອງທີ ໓໙)

ສມັຍນັ້ນ ພິກສຸຫລາຍຮູບລົງຈາກພູເຂົາຄິຊຸຢກູຕ ພົບເນື້ອເປັນເດນຫມາໃນ ຈຶ່ງໃຊ້ໃຫ້ອນຸປສັມບັນເຮັດໃຫ້ສຸກແລ້ວສັນ ພວກທ່ານເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ພິກສຸສັນເນື້ອທີ່ເປັນເດນຫມາໃນ ບໍ່ຕ້ອງອາບັຕິ" (ເຣື້ອງທີ ໓໙)
ສມັຍນັ້ນ ພິກສຸຫລາຍຮູບລົງຈາກພູເຂົາຄິຊຸຢກູຕ ພົບເນື້ອເປັນເດນຫມາປ່າ ຈຶ່ງໃຊ້ໃຫ້ອນຸປສັມບັນເຮັດໃຫ້ສຸກແລ້ວສັນ ພວກທ່ານເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ພິກສຸສັນເນື້ອທີ່ສັຕວ໌ເດັຽຣະສານຄອບຄອງ ບໍ່ຕ້ອງອາບັຕິ" (ເຣື້ອງທີ ໔໐)

## ເຣື້ອງບໍ່ມີມູລ ໕ ເຣື້ອງ

[໑໔໑] ສມັຍນັ້ນ ເມື່ອພິກສຸເຈົ້າຫນ້າທີ່ກຳລັງແຈກອາຫາຣແກ່ສົງຂ໌ ພິກສຸຮູບນຶ່ງກ່າວຄຳບໍ່ມີມູລວ່າ "ຈົ່ງໃຫ້ເພື່ອພິກສຸອື່ນອີກສ່ວນນຶ່ງ" ແລ້ວຮັບໄປ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ

ທ່ານບໍ່ຕ້ອງອາບັດປາຣາຊິກ ແຕ່ຕ້ອງອາບັດປາຈິຕຕີຍ໌ ເພາະກ່າວເທັຈທັງທີ່ຮູ້" (ເຣື່ອງທີ ໔໑)

ສມັຍນັ້ນ ເມື່ອພິກສຸເຈົ້າຫນ້າທີ່ກຳລັງແຈກຂອງຄ້ຽວແກ່ສົງຂ໌ ພິກສຸຮູບນຶ່ງກ່າວຄຳບໍ່ມີມູລວ່າ "ຈົ່ງໃຫ້ເພື່ອພິກສຸອື່ນອີກສ່ວນນຶ່ງ" ແລ້ວຮັບໄປ ທ່ານເກີດຄວາມກັງວົລໃຈວ່າເຮົາຕ້ອງອາບັດປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບພຣະອົງຄ໌ຕຣັສວ່າ "ພິກສຸທ່ານບໍ່ຕ້ອງອາບັດປາຣາຊິກ ແຕ່ຕ້ອງອາບັດປາຈິຕຕີຍ໌ ເພາະກ່າວເທັຈທັງທີ່ຮູ້" (ເຣື່ອງທີ ໔໒)

ສມັຍນັ້ນ ເມື່ອພິກສຸເຈົ້າຫນ້າທີ່ກຳລັງແຈກຂນົມແກ່ສົງຂ໌ ພິກສຸຮູບນຶ່ງກ່າວຄຳບໍ່ມີມູລວ່າ "ຈົ່ງໃຫ້ເພື່ອພິກສຸອື່ນອີກສ່ວນນຶ່ງ" ແລ້ວຮັບໄປ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັດປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທ່ານບໍ່ຕ້ອງອາບັດປາຣາຊິກ ແຕ່ຕ້ອງອາບັດປາຈິຕຕີຍ໌ ເພາະກ່າວເທັຈທັງທີ່ຮູ້" (ເຣື່ອງທີ ໔໓)

ສມັຍນັ້ນ ເມື່ອພິກສຸເຈົ້າຫນ້າທີ່ກຳລັງແຈກນ້ຳອ້ອຍແກ່ສົງຂ໌ ພິກສຸຮູບນຶ່ງກ່າວຄຳບໍ່ມີມູລວ່າ "ຈົ່ງໃຫ້ເພື່ອພິກສຸອື່ນອີກສ່ວນນຶ່ງ" ແລ້ວຮັບໄປ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັດປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທ່ານບໍ່ຕ້ອງອາບັດປາຣາຊິກ ແຕ່ຕ້ອງອາບັດປາຈິຕຕີຍ໌ ເພາະກ່າວເທັຈທັງທີ່ຮູ້" (ເຣື່ອງທີ ໔໔)

ສມັຍນັ້ນ ເມື່ອພິກສຸເຈົ້າຫນ້າທີ່ກຳລັງແຈກຜົລຫມາກພລັບແກ່ສົງຂ໌ ພິກສຸຮູບນຶ່ງກ່າວຄຳບໍ່ມີມູລວ່າ "ຈົ່ງໃຫ້ເພື່ອພິກສຸອື່ນອີກສ່ວນນຶ່ງ" ແລ້ວຮັບໄປ ທ່ານເກີດຄວາມກັງວົລໃຈວ່າເຮົາຕ້ອງອາບັດປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທ່ານບໍ່ຕ້ອງອາບັດປາຣາຊິກ ແຕ່ຕ້ອງອາບັດປາຈິຕຕີຍ໌ ເພາະກ່າວເທັຈທັງທີ່ຮູ້" (ເຣື່ອງທີ ໔໕)

### ໃນສມັຍເຂົ້າຍາກຫມາກແພງມີ ໕ ເຣື່ອງ ຄື
### ເຣື່ອງເຂົ້າສຸກ ໑ ເຣື່ອງ

[໑໔໔] ສມັຍນັ້ນ ເມື່ອເກີດເຂົ້າຍາກຫມາກແພງ ພິກສຸຮູບນຶ່ງເຂົ້າໄປຮ້ານຂາຍເຂົ້າສຸກ ມີໄຖຍຈິຕໄດ້ລັກເຂົ້າສຸກໄປເຕັມບາຕຣ ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັດປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັດປາຣາຊິກ" (ເຣື່ອງທີ ໔໖)

### ເຣື່ອງເນື້ອ ໑ ເຣື່ອງ

ສມັຍນັ້ນ ເມື່ອເກີດເຂົ້າຍາກຫມາກແພງ ພິກສຸຮູບນຶ່ງເຂົ້າໄປຮ້ານຂາຍເນື້ອສຸກ ມີໄຖຍຈິດໄດ້ລັກເນື້ອໄປເຕັມບາຕຣ ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັດປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທ່ານຕ້ອງອາບັດປາຣາຊິກ" (ເຣື່ອງ ໔໗)

ເຣື້ອງຂນົມ ໑ ເຣື້ອງ

ສມັຍນັ້ນ ເມື່ອເກີດເຂົ້າຍາກຫມາກແພງ ພິກສຸຮູບນຶ່ງເຂົ້າໄປຮ້ານຂາຍຂນົມ ມີໄຖຍຈິດໄດ້ລັກຂນົມໄປເຕັມບາຕຣ ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັດປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທ່ານຕ້ອງອາບັດປາຣາຊິກ" (ເຣື່ອງທີ ໔໘ )

ເຣື້ອງນ້ຳຕາລກ້ອນ ໑ ເຣື້ອງ

ສມັຍນັ້ນ ເມື່ອເກີດເຂົ້າຍາກຫມາກແພງ ພິກສຸຮູບນຶ່ງເຂົ້າໄປຮ້ານຂາຍນ້ຳຕາລກ້ອນ ມີໄຖຍຈິດໄດ້ລັກນ້ຳຕາລກ້ອນໄປເຕັມບາຕຣ ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັດປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ"ພິກສຸ ທ່ານຕ້ອງອາບັດປາຣາຊິກ"(ເຣື້ອງທີ ໔໙)

ເຣື້ອງຂນົມຕົ້ມ ໑ ເຣື້ອງ

ສມັຍນັ້ນ ເມື່ອເກີດເຂົ້າຍາກຫມາກແພງ ພິກສຸຮູບນຶ່ງເຂົ້າໄປຮ້ານຂາຍຂນົມຕົ້ມ ມີໄຖຍຈິດໄດ້ລັກຂນົມຕົ້ມໄປເຕັມບາຕຣ ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັດປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທ່ານຕ້ອງອາບັດປາຣາຊິກ" (ເຣື້ອງທີ ໕໐)

ເຣື້ອງບໍຣິຂາຣ ໕ ເຣື້ອງ

[໑໔໓] ສມັຍນັ້ນ ພິກສຸຮູບນຶ່ງພົບເຄື່ອງໃຊ້ສອຍຕອນກາງເວັນ ໄດ້ທຳເຄື່ອງຫມາຍໄວ້ດ້ວຍຕັ້ງໃຈວ່າຈະລັກຕອນກາງຄືນ ທ່ານສຳຄັນເຄື່ອງໃຊ້ສອຍນັ້ນວ່າເປັນເຄື່ອງໃຊ້ສອຍນັ້ນ ຈຶ່ງໄດ້

ລັກເຄື່ອງໃຊ້ສອຍນັ້ນມາ ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໕໑)

ສມັຍນັ້ນ ພິກສຸຮູບນຶ່ງພົບເຄື່ອງໃຊ້ສອຍຕອນກາງເວັນ ໄດ້ທຳເຄື່ອງຫມາຍໄວ້ດ້ວຍຕັ້ງໃຈວ່າ ຈະລັກຕອນກາງຄືນ ທ່ານສຳຄັນເຄື່ອງໃຊ້ສອຍນັ້ນວ່າເປັນເຄື່ອງໃຊ້ສອຍນັ້ນ ແຕ່ໄດ້ລັກເຄື່ອງໃຊ້ສອຍອື່ນມາ ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະ ອົງຄ໌ ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໕໒)

ສມັຍນັ້ນ ພິກສຸຮູບນຶ່ງພົບເຄື່ອງໃຊ້ສອຍຕອນກາງເວັນ ໄດ້ທຳເຄື່ອງຫມາຍໄວ້ດ້ວຍຕັ້ງໃຈວ່າ ຈະລັກຕອນກາງຄືນ ທ່ານສຳຄັນເຄື່ອງໃຊ້ສອຍນັ້ນວ່າເປັນເຄື່ອງໃຊ້ສອຍອື່ນ ແຕ່ໄດ້ລັກເຄື່ອງໃຊ້ສອຍນັ້ນມາ ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະ ອົງຄ໌ ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໕໓)

ສມັຍນັ້ນ ພິກສຸຮູບນຶ່ງພົບເຄື່ອງໃຊ້ສອຍຕອນກາງເວັນ ໄດ້ທຳເຄື່ອງຫມາຍໄວ້ດ້ວຍຕັ້ງໃຈວ່າ ຈະລັກຕອນກາງຄືນ ທ່ານສຳຄັນເຄື່ອງໃຊ້ສອຍນັ້ນວ່າເປັນເຄື່ອງໃຊ້ສອຍອື່ນ ແຕ່ໄດ້ລັກເຄື່ອງໃຊ້ສອຍອື່ນມາ ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະ ອົງຄ໌ ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໕໔)

ສມັຍນັ້ນ ພິກສຸຮູບນຶ່ງພົບເຄື່ອງໃຊ້ສອຍຕອນກາງເວັນ ໄດ້ທຳເຄື່ອງຫມາຍໄວ້ດ້ວຍຕັ້ງໃຈວ່າ ຈະລັກຕອນກາງຄືນ ທ່ານສຳຄັນເຄື່ອງໃຊ້ສອຍນັ້ນວ່າເປັນເຄື່ອງໃຊ້ສອຍນັ້ນ ແຕ່ລັກເຄື່ອງໃຊ້ສອຍຂອງຕົນເອງ ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິທຸກກົຏ" (ເຣື່ອງທີ ໕໕)

## ເຣື້ອງຖົງ ໑ ເຣື້ອງ

[໑໔໔] ສມັຍນັ້ນ ພິກສຸຮູບນຶ່ງພົບຖົງອາງໄວ້ເທິງຕັ່ງ ຄິດວ່າຫາກຫຍິບໄປຈາກຕັ່ງຈະເປັນປາຣາຊິກ ຈຶ່ງຍົກເອົາໄປພ້ອມທັງຕັ່ງ ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່

ຈຶ່ງນຳເລື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເລື້ອງທີ ໕໖)

## ເລື້ອງເສື່ອ ໑ ເລື້ອງ

ສມັຍນັ້ນ ພິກສຸຮູບນຶ່ງມີໄຖຍຈິຕໄດ້ລັກເສື່ອຂອງສົງຂ໌ ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາ ຣາຊິກຫລືບໍ່ ຈຶ່ງນຳເລື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເລື້ອງທີ ໕໗)

## ເລື້ອງຣາວຈີວອນ ໑ ເລື້ອງ

[໑໔໕] ສມັຍນັ້ນ ພິກສຸຮູບນຶ່ງມີໄຖຍຈິຕໄດ້ລັກຈີວອນທີ່ຣາວຈີວອນ ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເລື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເລື້ອງທີ ໕໘)

## ເລື້ອງບໍ່ອອກໄປ ໑ ເລື້ອງ

ສມັຍນັ້ນ ພິກສຸຮູບນຶ່ງລັກຈີວອນໃນວິຫາຣ ຄິດວ່າຫາກຕົນອອກໄປຈາກວິຫາຣຈະເປັນປາຣາຊິກ ຈຶ່ງບໍ່ຍອມອອກໄປຈາກວິຫາຣ ພິກສຸທັງຫລາຍຈຶ່ງນຳເລື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ໂມຄບຸຣຸສນັ້ນຈະອອກຈາກວິຫາຣຫລືບໍ່ອອກກໍຕາມ ກໍຕ້ອງອາບັຕິປາຣາຊິກ" (ເລື້ອງທີ ໕໙)

## ເລື້ອງຖືວິສາສະສັນຂອງຄ້ຽວ ໑ ເລື້ອງ

[໑໔໖] ສມັຍນັ້ນ ພິກສຸ ໔ ຮູບເປັນເພື່ອນກັນ ພິກສຸຮູບນຶ່ງເຂົ້າໄປບິນທບາຕຍັງໝູ່ບ້ານ ເມື່ອພິກສຸເຈົ້າໜ້າທີ່ກຳລັງແຈກຂອງຂົບຄ້ຽວແກ່ສົງຂ໌ ພິກສຸຮູບທີ່ເປັນເພື່ອນຮັບເອົາສ່ວນແບ່ງຂອງເພື່ອນໄປແລ້ວຖືວິສາສະສັນສ່ວນແບ່ງຂອງພິກສຸນັ້ນ ທ່ານຮູ້ເລື້ອງເຂົ້າຈຶ່ງກ່າວຫາພິກສຸນັ້ນວ່າ "ທ່ານບໍ່ເປັນພຣະ" ພິກສຸນັ້ນເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເລື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ" "ຂ້າ

ພຣະພຸທຫຼເຈົ້າຖືເອົາດ້ວຍວິສາສະ ພຣະພຸທ ຫຼຂນ້ອຍ” “ພິກສຸ ທ່ານບໍ່ຕ້ອງອາບັຕິ ເພາະຖືເອົາດ້ວຍວິສາສະ” (ເຣື້ອງທີ ໕໐)

## ເຣື້ອງສຳຄັນວ່າເປັນຂອງຂອງຕົນ ໔ ເຣື້ອງ

[໑໔໗] ສມັຍນັ້ນ ພິກສຸຫລາຍຮູບກຳລັງຕັດຍິບຈີວອນ ເມື່ອພິກສຸເຈົ້າໜ້າທີ່ກຳລັງແຈກຂອງຂິບຄັ່ງວແກ່ສົງຂ໌ ພິກສຸທຸກຮູບຕ່າງນຳສ່ວນແບ່ງຂອງຕົນໄປເກັບໄວ້ ພິກສຸຮູບນຶ່ງສຳຄັນສ່ວນແບ່ງຂອງພິກສຸອີກຮູບນຶ່ງວ່າເປັນສ່ວນແບ່ງຂອງຕົນຈຶ່ງສັນເສັ່ງ ພິກສຸເຈົ້າຂອງສ່ວນແບ່ງຮູ້ເຣື້ອງເຂົ້າ ຈຶ່ງກ່າວຫາພິກສຸນັ້ນວ່າ “ທ່ານບໍ່ເປັນພຣະ” ພິກສຸຮູບທີ່ຖືກກ່າວຫາເກີດຄວາມກັງວົລໃຈວ່າເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ “ພິກສຸ ທ່ານຄິດຢ່າງໃດ” “ຂ້າພຣະພຸທຫຼເຈົ້າ
ສຳຄັນວ່າເປັນຂອງຂອງຕົນ ພຣະພຸທຫຼເຈົ້າຂ້າ” “ພິກສຸ ທ່ານສຳຄັນວ່າເປັນຂອງຂອງຕົນ ບໍ່ຕ້ອງອາບັຕິ” (ເຣື້ອງທີ ໕໑)
ສມັຍນັ້ນ ພິກສຸຫລາຍຮູບກຳລັງຕັດຍິບຈີວອນ ເມື່ອພິກສຸເຈົ້າໜ້າທີ່ກຳລັງແຈກຂອງຂິບຄັ່ງວແກ່ສົງຂ໌ ພິກສຸຮູບນຶ່ງເອົາບາຕຣຂອງພິກສຸອີກຮູບນຶ່ງນຳສ່ວນແບ່ງຂອງພິກສຸອີກຮູບນຶ່ງມາເກັບໄວ້ ພິກສຸເຈົ້າຂອງບາຕຣສຳຄັນວ່າເປັນສ່ວນແບ່ງຂອງຕົນຈຶ່ງສັນເສັ່ງ ພິກສຸຮູບທີ່ນຳບາຕຣໄປຮູ້ເຣື້ອງເຂົ້າ ຈຶ່ງກ່າວຫາພິກສຸນັ້ນວ່າ “ທ່ານບໍ່ເປັນພຣະ” ພິກສຸຮູບທີ່ຖືກກ່າວຫາເກີດຄວາມກັງວົລໃຈວ່າເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ “ພິກສຸ ທ່ານສຳຄັນວ່າເປັນຂອງຂອງຕົນ ບໍ່ຕ້ອງ ອາບັຕິ” (ເຣື້ອງທີ ໕໔)

## ເຣື້ອງບໍ່ໄດ້ລັກ ໆ ເຣື້ອງ

[໑໔໘] ສມັຍນັ້ນ ພວກລັກ ລັກຫມາກມ່ວງ ເຮັດໃຫ້ຜົລຫມາກມ່ວງຫລົ່ນແລ້ວຫໍ່ຖືໄປ ພວກເຈົ້າຂອງພາກັນຕິດຕາມ ພວກລັກເຫັນພວກເຈົ້າຂອງຈຶ່ງໂຍນຫໍ່ຜົລຫມາກມ່ວງຖິ້ມແລ້ວຫນີໄປ ພວກພິກສຸສຳຄັນວ່າເປັນຂອງບັງສຸກຸລ ຈຶ່ງໃຫ້ອນຸປສັມບັນເກັບຫມາກມ່ວງຫໍ່ນັ້ນໄປແລ້ວສັນ ພວກເຈົ້າຂອງກ່າວຫາພິກສຸເຫລົ່ານັ້ນວ່າ “ພວກທ່ານບໍ່ເປັນພຣະ” ພວກພິກສຸເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ “ພິກສຸທັງຫລາຍ ພວກທ່ານຄິດຢ່າງໃດ” “ພວກຂ້າພຣະພຸທຫຼເຈົ້າສຳຄັນວ່າເປັນຂອງບັງສຸກຸລ ພຣະພຸທຫຼເຈົ້າຂ້າ” “ພິກສຸທັງຫລາຍ ພວກທ່ານສຳຄັນ ວ່າເປັນຂອງບັງສຸກຸລ ບໍ່ຕ້ອງ

ອາບັຕິ” (ເຣື່ອງທີ ໘໓)
ສມັຍນັ້ນ ພວກລັກລັກຫມາກຫວ້າ ເຮັດໃຫ້ຜົລຫມາກຫວ້າຫລົ່ນແລ້ວຫໍ່ຖືໄປ ພວກເຈົ້າຂອງພາກັນຕິດຕາມ ພວກລັກເຫັນພວກເຈົ້າຂອງຈຶ່ງໂຍນຫໍ່ຫມາກຫວ້າຖິ້ມແລ້ວຫນີໄປ ພວກພິກສຸສຳຄັນວ່າເປັນຂອງບັງສຸກຸລ ຈຶ່ງໃຫ້ອນຸປສັມບັນເກັບຫໍ່ຫມາກຫວ້ານັ້ນໄປແລ້ວສັນ ພວກເຈົ້າຂອງກ່າວຫາພິກສຸເຫລົ່ານັ້ນວ່າ “ພວກທ່ານບໍ່ເປັນພຣະ” ພວກພິກສຸເກີດຄວາມກັງວົລໃຈວ່າພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ “ພິກສຸທັງຫລາຍ ພວກທ່ານຄິດຢ່າງໃດ” “ພວກຂ້າພຣະພຸທທເຈົ້າສຳຄັນວ່າເປັນຂອງບັງສຸກຸລ ພຣະພຸທທເຈົ້າຂ້າ” “ພິກສຸທັງຫລາຍ ພວກທ່ານສຳຄັນວ່າເປັນ
ຂອງບັງສຸກຸລ ບໍ່ຕ້ອງອາບັຕິ” (ເຣື່ອງທີ ໘໔)
ສມັຍນັ້ນ ພວກລັກລັກຫມາກນີ້ຫມາກນີ້ສຳປະລໍ ເຮັດໃຫ້ຜົລຫມາກນີ້ສຳປະລໍຫລົ່ນແລ້ວຫໍ່ຖືໄປ ພວກເຈົ້າຂອງພາກັນຕິດຕາມ ພວກລັກເຫັນພວກເຈົ້າຂອງຈຶ່ງໂຍນຫໍ່ຫມາກນີ້ສຳປະລໍຖິ້ມແລ້ວຫນີໄປ ພວກພິກສຸສຳຄັນວ່າເປັນຂອງບັງສຸກຸລ ຈຶ່ງໃຫ້ອນຸປສັມບັນເກັບຫໍ່ຜົລຫມາກນີ້ສຳປະລໍນັ້ນໄປແລ້ວສັນ ພວກເຈົ້າຂອງກ່າວຫາພິກສຸເຫລົ່ານັ້ນວ່າ “ພວກທ່ານບໍ່ເປັນພຣະ” ພວກພິກສຸເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາ ຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ “ພິກສຸທັງຫລາຍ ພວກທ່ານຄິດຢ່າງໃດ” “ພວກຂ້າພຣະພຸທທເຈົ້າສຳຄັນວ່າເປັນຂອງບັງສຸກຸລ ພຣະພຸທທເຈົ້າຂ້າ” “ພິກສຸ
ທັງຫລາຍ ພວກທ່ານສຳຄັນວ່າເປັນຂອງບັງສຸກຸລ ບໍ່ຕ້ອງອາບັຕິ” (ເຣື່ອງທີ ໘໕)
ສມັຍນັ້ນ ພວກລັກລັກຫມາກນີ້ ເຮັດໃຫ້ຜົລຫມາກນີ້ຫລົ່ນແລ້ວຫໍ່ຖືໄປ ພວກເຈົ້າຂອງພາກັນຕິດຕາມ ພວກລັກເຫັນພວກເຈົ້າຂອງຈຶ່ງໂຍນຫໍ່ຫມາກນີ້ຖິ້ມແລ້ວຫນີໄປ ພວກພິກສຸສຳຄັນວ່າເປັນຂອງບັງສຸກຸລ ຈຶ່ງໃຫ້ອນຸປສັມບັນເກັບຫໍ່ຫມາກນີ້ນັ້ນໄປແລ້ວສັນ ພວກເຈົ້າຂອງກ່າວຫາພິກສຸເຫລົ່ານັ້ນວ່າ “ພວກທ່ານບໍ່ເປັນພຣະ” ພວກພິກສຸເກີດຄວາມກັງວົລໃຈວ່າພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ “ພິກສຸທັງຫລາຍ ພວກທ່ານຄິດຢ່າງໃດ” “ພວກຂ້າພຣະພຸທທເຈົ້າສຳຄັນວ່າເປັນຂອງບັງສຸກຸລ ພຣະພຸທທເຈົ້າຂ້າ” “ພິກສຸທັງຫລາຍ ພວກທ່ານສຳຄັນວ່າເປັນຂອງບັງສຸກຸລ ບໍ່ຕ້ອງອາບັຕິ”
(ເຣື່ອງທີ ໘໘)
ສມັຍນັ້ນ ພວກລັກລັກຫມາກຕາລສຸກ ເຮັດໃຫ້ຫມາກຕາລສຸກຫລົ່ນແລ້ວຫໍ່ຖືໄປ ພວກເຈົ້າຂອງພາກັນຕິດ ຕາມ ພວກລັກເຫັນພວກເຈົ້າຂອງຈຶ່ງໂຍນຫໍ່ຫມາກຕາລສຸກຖິ້ມແລ້ວຫນີໄປ ພວກ

ພິກສຸສຳຄັນວ່າເປັນຂອງບັງສຸກຸລ ຈຶ່ງໃຫ້ອນຸປສັມບັນເກັບຫໍ່ຫມາກຕາລສຸກນັ້ນໄປແລ້ວສັນ ພວກເຈົ້າຂອງກ່າວຫາພິກສຸເຫລົ່ານັ້ນວ່າ "ພວກທ່ານບໍ່ເປັນພຣະ" ພວກພິກສຸເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸທັງຫລາຍ ພວກທ່ານຄິດຢ່າງໃດ" "ພວກຂ້າພຣະພຸທຫເຈົ້າສຳຄັນວ່າເປັນຂອງບັງສຸກຸລ ພຣະພຸທຫເຈົ້າຂ້າ" "ພິກສຸທັງຫລາຍ ພວກທ່ານສຳຄັນ ວ່າເປັນຂອງບັງສຸກຸລບໍ່ຕ້ອງອາບັຕິ" (ເຣື່ອງທີ ຝ໗)

ສມັຍນັ້ນ ພວກລັກລັກອ້ອຍ ຕັດອ້ອຍແລ້ວມັດຖືໄປ ພວກເຈົ້າຂອງພາກັນຕິດຕາມພວກລັກເຫັນພວກເຈົ້າຂອງຈຶ່ງໂຍນມັດອ້ອຍຖິ້ມແລ້ວຫນີໄປ ພວກພິກສຸສຳຄັນວ່າເປັນຂອງບັງສຸກຸລ ຈຶ່ງໃຫ້ອນຸປສັມບັນເກັບມັດອ້ອຍນັ້ນໄປແລ້ວສັນ ພວກເຈົ້າຂອງກ່າວຫາພິກສຸເຫລົ່ານັ້ນວ່າ "ພວກທ່ານບໍ່ເປັນພຣະ" ພວກພິກສຸເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸທັງຫລາຍ ພວກທ່ານຄິດຢ່າງໃດ" "ພວກຂ້າພຣະພຸທຫເຈົ້າສຳຄັນວ່າເປັນຂອງບັງສຸກຸລ ພຣະພຸທຫເຈົ້າຂ້າ" "ພິກສຸທັງຫລາຍ ພວກທ່ານສຳຄັນວ່າເປັນຂອງບັງສຸກຸລ ບໍ່ຕ້ອງອາບັຕິ" (ເຣື່ອງທີ ຝ໘)

ສມັຍນັ້ນ ພວກລັກລັກຜົລຫມາກພລັບ ເຮັດໃຫ້ຜົລຫມາກພລັບຫລົ່ນແລ້ວຫໍ່ຖືໄປ ພວກເຈົ້າຂອງພາກັນຕິດ ຕາມ ພວກລັກເຫັນພວກເຈົ້າຂອງຈຶ່ງໂຍນຫໍ່ຜົລຫມາກພລັບຖິ້ມແລ້ວຫນີໄປ ພວກພິກສຸສຳຄັນວ່າເປັນຂອງບັງສຸກຸລ ຈຶ່ງໃຫ້ອນຸປສັມບັນເກັບຫໍ່ຜົລຫມາກພລັບນັ້ນໄປແລ້ວສັນ ພວກເຈົ້າຂອງກ່າວຫາພິກສຸເຫລົ່ານັ້ນວ່າ "ພວກທ່ານບໍ່ເປັນພຣະ" ພວກພິກສຸເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸທັງຫລາຍ ພວກທ່ານຄິດຢ່າງໃດ" "ພວກຂ້າພຣະພຸທຫເຈົ້າສຳຄັນວ່າເປັນຂອງບັງສຸກຸລ ພຣະພຸທຫເຈົ້າຂ້າ" "ພິກສຸທັງຫລາຍ ພວກທ່ານສຳຄັນ ວ່າເປັນຂອງບັງສຸກຸລບໍ່ຕ້ອງອາບັຕິ" (ເຣື່ອງທີ ຝ໙)

## ເຣື້ອງລັກ ໆ ເຣື້ອງ

ສມັຍນັ້ນ ພວກລັກລັກຫມາກມ່ວງ ເຮັດໃຫ້ຜົລຫມາກມ່ວງຫລົ່ນແລ້ວຫໍ່ຖືໄປ ພວກເຈົ້າຂອງພາກັນຕິດຕາມ ພວກລັກເຫັນພວກເຈົ້າຂອງຈຶ່ງໂຍນຫໍ່ຜົລຫມາກມ່ວງຖິ້ມແລ້ວຫນີໄປ ພວກພິກສຸມີໄຖຍຈິຕ ຄິດວ່າພວກເຈົ້າຂອງຈະເຫັນ ຈຶ່ງສັນຫມາກມ່ວງ ພວກເຈົ້າຂອງກ່າວຫາພິກສຸເຫລົ່ານັ້ນ

ວ່າ "ພວກທ່ານບໍ່ເປັນພຣະ" ພວກພິກຂຸເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກຂຸທັງຫລາຍ ພວກທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ๆ໐)

ສມັຍນັ້ນ ພວກລັກລັກຫມາກຫວ້າ ເຮັດໃຫ້ຫມາກຫວ້າຫລົ່ນແລ້ວຫໍ່ຖືໄປ ພວກເຈົ້າຂອງພາກັນຕິດຕາມ ພວກລັກເຫັນພວກເຈົ້າຂອງຈຶ່ງໂຍນຫໍ່ຜົລຫວ້າຖິ້ມແລ້ວຫນີໄປ ພວກພິກຂຸມີໄຖຍຈິຕຄິດວ່າພວກເຈົ້າຂອງຈະເຫັນ ຈຶ່ງສັນຫມາກຫວ້າ ພວກເຈົ້າຂອງກ່າວຫາພິກຂຸເຫລົ່ານັ້ນວ່າ "ພວກທ່ານບໍ່ເປັນພຣະ" ພວກພິກຂຸເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ"ພິກຂຸທັງຫລາຍ ພວກທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ๆ໑)

ສມັຍນັ້ນ ພວກລັກລັກຫມາກນີ້ສຳປະລໍ ເຮັດໃຫ້ຫມາກນີ້ສຳປະລໍຫລົ່ນແລ້ວຫໍ່ຖືໄປ ພວກເຈົ້າຂອງພາກັນຕິດ ຕາມ ພວກລັກເຫັນພວກເຈົ້າຂອງຈຶ່ງໂຍນຫໍ່ຫມາກນີ້ສຳປະລໍຖິ້ມແລ້ວຫນີໄປ ພວກພິກຂຸມີໄຖຍຈິຕຄິດວ່າ ພວກເຈົ້າຂອງຈະເຫັນ ຈຶ່ງສັນຫມາກນີ້ສຳປະລໍ ພວກເຈົ້າຂອງກ່າວຫາພິກຂຸເຫລົ່ານັ້ນວ່າ "ພວກທ່ານບໍ່ເປັນພຣະ" ພວກພິກຂຸເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກຂຸທັງຫລາຍ ພວກທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ๆ๔)

ສມັຍນັ້ນ ພວກລັກລັກຫມາກນີ້ ເຮັດໃຫ້ຜົລຫມາກນີ້ຫລົ່ນແລ້ວຫໍ່ຖືໄປ ພວກເຈົ້າຂອງພາກັນຕິດຕາມ ພວກລັກເຫັນພວກເຈົ້າຂອງຈຶ່ງໂຍນຫໍ່ຫມາກນີ້ຖິ້ມແລ້ວຫນີໄປ ພວກພິກຂຸມີໄຖຍຈິຕຄິດວ່າ ພວກເຈົ້າຂອງຈະ ເຫັນ ຈຶ່ງສັນຫມາກນີ້ ພວກເຈົ້າຂອງກ່າວຫາພິກຂຸເຫລົ່ານັ້ນວ່າ "ພວກທ່ານບໍ່ເປັນພຣະ" ພວກພິກຂຸເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງ ຊາບ ພຣະອົງຄ໌ຕຣັສວ່າ "ພິກຂຸທັງຫລາຍ ພວກທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ๆ໕)

ສມັຍນັ້ນ ພວກລັກລັກຫມາກຕາລສຸກ ເຮັດໃຫ້ຫມາກຕາລສຸກຫລົ່ນແລ້ວຫໍ່ຖືໄປ ພວກເຈົ້າຂອງພາກັນຕິດ ຕາມ ພວກລັກເຫັນພວກເຈົ້າຂອງຈຶ່ງໂຍນຫໍ່ຫມາກຕາລສຸກຖິ້ມແລ້ວຫນີໄປ ພວກພິກຂຸມີໄຖຍຈິຕຄິດວ່າ ພວກເຈົ້າຂອງຈະເຫັນ ຈຶ່ງສັນຫມາກຕາລສຸກ ພວກເຈົ້າຂອງກ່າວຫາພິກຂຸເຫລົ່ານັ້ນວ່າ "ພວກທ່ານບໍ່ເປັນພຣະ" ພວກພິກຂຸເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກຂຸ

ທັງຫລາຍ ພວກທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໗໔)
ສມັຍນັ້ນ ພວກລັກລັກອ້ອຍ ຕັດອ້ອຍແລ້ວມັດຖືໄປ ພວກເຈົ້າຂອງພາກັນຕິດຕາມ ພວກລັກເຫັນພວກເຈົ້າຂອງຈຶ່ງໂຍນມັດອ້ອຍຖິ້ມແລ້ວຫນີໄປ ພວກພິກສຸມີໄຖຍຈິຕຄິດວ່າພວກເຈົ້າຂອງຈະເຫັນຈຶ່ງສັນອ້ອຍ ພວກເຈົ້າຂອງກ່າວຫາພິກສຸເຫລົ່ານັ້ນວ່າ "ພວກທ່ານບໍ່ເປັນພຣະ" ພວກພິກສຸເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ພວກທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໗໕)
ສມັຍນັ້ນ ພວກລັກລັກຜົລຫມາກພລັບ ເຮັດໃຫ້ຜົລຫມາກພລັບຫລົ່ນແລ້ວຫໍ່ຖືໄປ ພວກເຈົ້າຂອງພາກັນຕິດ ຕາມ ພວກລັກເຫັນພວກເຈົ້າຂອງຈຶ່ງໂຍນຫໍ່ຜົລຫມາກພລັບຖິ້ມແລ້ວຫນີໄປ ພວກພິກສຸມີໄຖຍຈິຕຄິດວ່າ ພວກເຈົ້າຂອງຈະເຫັນ ຈຶ່ງສັນຜົລຫມາກພລັບ ພວກເຈົ້າຂອງກ່າວຫາພິກສຸເຫລົ່ານັ້ນວ່າ "ພວກທ່ານບໍ່ເປັນພຣະ" ພວກພິກສຸເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ພວກທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໗໖)

## ເຣື່ອງລັກຂອງສົງຄ໌ ໗ ເຣື່ອງ

ສມັຍນັ້ນ ພິກສຸຮູບນຶ່ງມີໄຖຍຈິຕ ໄດ້ລັກຫມາກມ່ວງຂອງສົງຄ໌ ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໗໗)
ສມັຍນັ້ນ ພິກສຸຮູບນຶ່ງມີໄຖຍຈິຕ ໄດ້ລັກຫມາກຫວ້າຂອງສົງຄ໌ ແລ້ວເກີດຄວາມກັງວົລໃຈວ່າເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໗໘)
ສມັຍນັ້ນ ພິກສຸຮູບນຶ່ງມີໄຖຍຈິຕ ໄດ້ລັກຫມາກມີ້ສຳປະລໍຂອງສົງຄ໌ ແລ້ວເກີດຄວາມກັງວົລໃຈວ່າເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໗໙)
ສມັຍນັ້ນ ພິກສຸຮູບນຶ່ງມີໄຖຍຈິຕ ໄດ້ລັກຫມາກມີ້ຂອງສົງຄ໌ ແລ້ວເກີດຄວາມກັງວົລໃຈວ່າເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໘໐)

ສມັຍນັ້ນ ພິກສຸຮູບນຶ່ງມີໄຖຍຈິຕ ໄດ້ລັກຫມາກຕາລສຸກຂອງສົງຂ໌ ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໗໑)

ສມັຍນັ້ນ ພິກສຸຮູບນຶ່ງມີໄຖຍຈິຕ ໄດ້ລັກອ້ອຍຂອງສົງຂ໌ ແລ້ວເກີດຄວາມກັງວົລໃຈວ່າເຮົາຕ້ອງອາບັຕິປາຣາ ຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໗໔)

ສມັຍນັ້ນ ພິກສຸຮູບນຶ່ງມີໄຖຍຈິຕ ໄດ້ລັກຫມາກພລັບຂອງສົງຂ໌ ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໗໓)

## ເຣື້ອງລັກດອກໄມ້ ໔ ເຣື້ອງ

[໑໔໙] ສມັຍນັ້ນ ພິກສຸຮູບນຶ່ງໄປສວນດອກໄມ້ ມີໄຖຍຈິຕ ໄດ້ລັກດອກໄມ້ທີ່ເຂົາເກັບໄວ້ແລ້ວ ມີຣາຄາ ໕ ມາສກ ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໗໔)

ສມັຍນັ້ນ ພິກສຸຮູບນຶ່ງໄປສວນດອກໄມ້ ມີໄຖຍຈິຕ ໄດ້ລັກເກັບດອກໄມ້ ມີຣາຄາ ໕ ມາສກ ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະ ອົງຄ໌ ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໗໕)

## ເຣື້ອງເວົ້າຕາມຄຳບອກ ໓ ເຣື້ອງ

[໑໕໐] ສມັຍນັ້ນ ພິກສຸຮູບນຶ່ງກຳລັງເຂົ້າໄປຫມູ່ບ້ານ ໄດ້ບອກພິກສຸອີກຮູບນຶ່ງວ່າ "ທ່ານ ຂະນ້ອຍຈະໄປບອກຕະກູນອຸປັຕຖາກໃຫ້ ຕາມທີ່ທ່ານສັ່ງ" ຄັນທ່ານໄປເຖິງຈຶ່ງໃຫ້ເຂົານຳຜ້າມາ ໑ ຜືນ ແລ້ວໃຊ້ເສັຽເອງ ພິກສຸຜູ້ສັ່ງຮູ້ເຂົ້າຈຶ່ງກ່າວຫາພິກສຸນັ້ນວ່າ "ທ່ານບໍ່ເປັນພຣະ" ພິກສຸຮູບນັ້ນເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ອີກຢ່າງນຶ່ງ ພິກສຸທັງຫລາຍ ພິກສຸບໍ່ເພິງກ່າວວ່າ ຂະນ້ອຍຈະບອກຕາມທີ່ທ່ານສັ່ງ ພິກສຸໃດເພິງກ່າວ ຕ້ອງອາບັຕິທຸກກົຕ" (ເຣື້ອງທີ ໗໖)

ສມັຍນັ້ນ ພິກສຸຮູບນຶ່ງຈະເຂົ້າໄປຫມູ່ບ້ານ ພິກສຸອີກຮູບນຶ່ງໄດ້ສັ່ງທ່ານວ່າ "ທ່ານຊ່ອຍບອກຕະກູນອຸປັຕຖາກຂອງຂະນ້ອຍຕາມທີ່ຂະນ້ອຍສັ່ງດ້ອຍ" ພິກສຸນັ້ນຄັນໄປແລ້ວຈຶ່ງໃຫ້ຕະກູນອຸປັຕຖາກນຳຜ້າມາ ໑ ຄູ່ ຕົນເອງໃຊ້ ໑ ຜືນ ຖວາຍພິກສຸຜູ້ສັ່ງນັ້ນ ໑ ຜືນ ພິກສຸຜູ້ສັ່ງຮູ້ເຂົ້າຈຶ່ງກ່າວຫາພິກສຸນັ້ນວ່າ "ທ່ານບໍ່ເປັນພຣະ" ພິກສຸຮູບນັ້ນເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງ ຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ອີກຢ່າງນຶ່ງ ພິກສຸທັງຫລາຍ ພິກສຸບໍ່ເພິງກ່າວວ່າ ທ່ານຈົ່ງບອກຕາມທີ່ສັ່ງ ພິກສຸໃດເພິງກ່າວ ຕ້ອງອາບັຕິທຸກກົຕ" (ເຣື້ອງທີ ໗໗)

ສມັຍນັ້ນ ພິກສຸຮູບນຶ່ງກຳລັງໄປຫມູ່ບ້ານ ໄດ້ບອກພິກສຸອີກຮູບນຶ່ງວ່າ "ທ່ານ ຂະນ້ອຍຈະໄປບອກຕະກູນອຸປັຕຖາກຂອງທ່ານ ຕາມທີ່ທ່ານສັ່ງ" ພິກສຸແມ່ນຮູບນັ້ນກ່າວຢ່າງນີ້ວ່າ "ທ່ານຊ່ອຍບອກຕາມທີ່ຂະນ້ອຍສັ່ງ" ພິກສຸນັ້ນ ຄັນໄປເຖິງຈຶ່ງໃຫ້ຕະກູນອຸປັຕຖາກນຳເນີຍໃສ ໑ ອາຬຫກະ ນ້ຳອ້ອຍງົບ ໑ ຕຸລະ ເຂົ້າສານ ໑ ໂທນະ ມາແລ້ວສັນເສັງເອງ ພິກສຸຜູ້ສັ່ງຮູ້ເຂົ້າຈຶ່ງກ່າວຫາພິກສຸນັ້ນວ່າ "ທ່ານບໍ່ເປັນພຣະ" ທ່ານເກີດຄວາມເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງ ຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ອີກຢ່າງນຶ່ງ ພິກສຸທັງຫລາຍ ພິກສຸບໍ່ເພິງກ່າວ ວ່າ ຂະນ້ອຍຈະບອກຕາມທີ່ສັ່ງ ແລະບໍ່ເພິງກ່າວວ່າ ທ່ານຈົ່ງບອກຕາມທີ່ສັ່ງ ພິກສຸໃດເພິງກ່າວ ຕ້ອງອາບັຕິທຸກກົຕ" (ເຣື້ອງທີ ໗໘)

## ເຣື້ອງນຳແກ້ວມນີຜ່ານດ່ານພາສີ ໓ ເຣື້ອງ

[໑໕໑] ສມັຍນັ້ນ ບຸຣຸສຄົນນຶ່ງນຳແກ້ວມນີຣາຄາແພງ ເດີນທາງໄກໄປກັບພິກສຸຮູບນຶ່ງ ຄັນເຫັນດ່ານພາສີ ຈຶ່ງໃສ່ແກ້ວມນີລົງໃນຍ່າມຂອງພິກສຸນັ້ນຜູ້ບໍ່ຮູ້ ເມື່ອເດີນພົ້ນດ່ານພາສີຈຶ່ງຖືໄປແຕ່ຜູ້ດຽວ ພິກສຸນັ້ນເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະ ອົງຄ໌ ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ" "ຂ້າພຣະພຸທທເຈົ້າບໍ່ຮູ້ ພຣະພຸທທເຈົ້າຂ້າ" "ພິກສຸ ທ່ານບໍ່ຮູ້ ບໍ່ຕ້ອງອາບັຕິ" (ເຣື້ອງທີ ໗໙)

ສມັຍນັ້ນ ບຸຣຸສຄົນນຶ່ງນຳແກ້ວມນີຣາຄາແພງເດີນທາງໄກໄປກັບພິກສຸຮູບນຶ່ງ ຄັນເຫັນດ່ານພາສີທຳລວງວ່າເປັນໄຂ້ແລ້ວມອບຫໍ່ຂອງຂອງຕົນໃຫ້ພິກສຸຖືໄປ ເມື່ອຍ່າງພົ້ນດ່ານພາສີໄປ ຈຶ່ງກ່າວກັບພິກສຸນັ້ນວ່າ "ທ່ານເອີຍ ກຣຸນາສົ່ງຫໍ່ຂອງໃຫ້ຂະນ້ອຍເຖີດ ຂະນ້ອຍບໍ່ໄດ້ເປັນໄຂ້" "ໂຍມ ທ່ານໄດ້ເຮັດຢ່າງນີ້ເພື່ອຫຍັງ" ບຸຣຸສນັ້ນຈຶ່ງບອກຄວາມນັ້ນໃຫ້ພິກສຸນັ້ນຊາບ ທ່ານເກີດຄວາມກັງວົລໃຈ

ວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ"
"ຂ້າພຣະພຸທທເຈົ້າບໍ່ຮູ້ ພຣະພຸທທເຈົ້າຂ້າ" "ພິກສຸ ທ່ານບໍ່ຮູ້ ບໍ່ຕ້ອງອາບັຕິ" (ເຣື່ອງທີ ໔໐)
[໑໕໔] ສມັຍນັ້ນ ພິກສຸຮູບນຶ່ງເດີນທາງໄກລໄປກັບຫມູ່ກວຽນ ຊາຍຄົນນຶ່ງເກັ້ງກ່ອນທ່ານດ້ວຍອາມິສ ເຫັນດ່ານພາສີຈຶ່ງມອບແກ້ວມນີຣາຄາແພງໃຫ້ພິກສຸນັ້ນດ້ວຍກ່າວວ່າ "ຂໍທ່ານກຣຸນາຊ່ວຍນຳແກ້ວມນີນີ້ຜ່ານດ່ານພາສີໄປດ້ວຍຂນ້ອຍ" ພິກສຸນັ້ນໄດ້ນຳແກ້ວມນີນັ້ນຜ່ານດ່ານພາສີໄປແລ້ວ ເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໔໑)

## ເຣື້ອງປ່ອຍຫມູ ໔ ເຣື່ອງ

[໑໕໕] ສມັຍນັ້ນ ພິກສຸຮູບນຶ່ງປ່ອຍຫມູທີ່ຕິດບ້ວງໄປດ້ວຍຄວາມສົງສາຣ ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ" "ຂ້າພຣະພຸທທເຈົ້າມີຄວາມປະສົງຄ໌ຈະຊ່ວຍເຫລືອ ພຣະພຸທທເຈົ້າຂ້າ" "ພິກສຸ ທ່ານມີຄວາມປະສົງຄ໌ຈະຊ່ວຍເຫລືອ ບໍ່ຕ້ອງອາບັຕິ" (ເຣື້ອງທີ ໔໔)
ສມັຍນັ້ນ ພິກສຸຮູບນຶ່ງມີໄຖຍຈິຕຄິດວ່າ ເຈົ້າຂອງຈະເຫັນ ຈຶ່ງປ່ອຍຫມູທີ່ຕິດບ້ວງໄປ ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ່ ໔໓)

## ເຣື້ອງປ່ອຍເນື້ອ ໔ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງປ່ອຍສັດຖືກບ້ວງໄປດ້ວຍຄວາມສົງສາຣແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ" "ຂ້າພຣະພຸທທເຈົ້າມີຄວາມປະສົງຄ໌ຈະຊ່ວຍເຫລືອ ພຣະພຸທທເຈົ້າຂ້າ" "ພິກສຸ ທ່ານມີຄວາມປະສົງຄ໌ຈະຊ່ວຍເຫລືອ ບໍ່ຕ້ອງອາບັຕິ" (ເຣື້ອງທີ ໔໔)
ສມັຍນັ້ນ ພິກສຸຮູບນຶ່ງມີໄຖຍຈິຕຄິດວ່າ ເຈົ້າຂອງຈະເຫັນ ຈຶ່ງປ່ອຍສັດທີ່ຕິດບ້ວງໄປແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ່ ໔໕)

## ເຣື້ອງປ່ອຍປາ ໔ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງປ່ອຍຝູງປາທີ່ຕິດລອບໄປດ້ວຍຄວາມສົງສານແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ" "ຂ້າພຣະພຸທທເຈົ້າ ມີຄວາມປະສົງຄ໌ຈະຊ່ວຍເຫລືອ ພຣະພຸທທເຈົ້າຂ້າ" "ພິກສຸ ທ່ານມີຄວາມປະສົງຄ໌ຈະຊ່ວຍເຫລືອ ບໍ່ຕ້ອງອາບັຕິ" (ເຣື້ອງທີ ລ໕)
ສມັຍນັ້ນ ພິກສຸຮູບນຶ່ງມີໄຖຍຈິຕຄິດວ່າ ເຈົ້າຂອງຈະເຫັນ ຈຶ່ງປ່ອຍຝູງປາທີ່ຕິດລອບໄປແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງ ທີ ລ໗)

## ເຣື້ອງກິ້ງຊັພຍ໌ໃນຍານ ໑ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງເຫັນຊັພຍ໌ໃນຍານຄິດວ່າ ເມື່ອເຮົາຫຍິບໄປຈາກຍານນີ້ຈັກເປັນປາຣາຊິກ ຈຶ່ງເຂັ່ງໃຫ້ກິ້ງແລ້ວຖືເອົາ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ລ໘)

## ເຣື້ອງຊິ້ນເນື້ອ ໔ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງຖືເອົາຊິ້ນສັດທີ່ແຫລວຈັບໄດ້ ເອົາມາດ້ວຍຕັ້ງໃຈວ່າຈະຄືນໃຫ້ເຈົ້າຂອງ ແຕ່ພວກເຈົ້າຂອງສັດກ່າວຫາພິກສຸນັ້ນວ່າ "ທ່ານບໍ່ເປັນພຣະ" ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ມີໄຖຍຈິຕ ບໍ່ຕ້ອງອາບັຕິ" (ເຣື້ອງທີ ລ໙)
ສມັຍນັ້ນ ພິກສຸຮູບນຶ່ງ ມີໄຖຍຈິຕຄິດວ່າ ເຈົ້າຂອງຈະເຫັນ ໄດ້ຖືເອົາຊິ້ນສັດທີ່ແຫລວຈັບໄດ້ເອົາມາ ພວກເຈົ້າຂອງສັດກ່າວຫາພິກສຸນັ້ນວ່າ "ທ່ານບໍ່ເປັນພຣະ" ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໑໐໐)

## ເຣື້ອງໄມ້ ໔ ເຣື້ອງ

[໑໕໔] ສມັຍນັ້ນ ພວກຊາວບ້ານຜູກແພແລ້ວແກ່ລົງແມ່ນ້ຳອຈິຣວດີ ເມື່ອເຊືອກຂາດ ໄມ້ທັງຫລາຍໄດ້ກະຈາຍໄປ ພວກພິກສຸສຳຄັນວ່າເປັນຂອງບັງສຸກຸລ ຈຶ່ງຊ່ວຍກັນຂົນໄມ້ຂຶ້ນຝັ່ງ ພວກເຈົ້າຂອງກ່າວຫາພິກສຸເຫລົ່ານັ້ນວ່າ "ພວກທ່ານບໍ່ເປັນພຣະ" ພວກພິກສຸເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ພວກທ່ານສຳຄັນວ່າເປັນຂອງບັງສຸກຸລ ບໍ່ຕ້ອງອາບັຕິ" (ເຣື່ອງທີ ໑໐໑)
ສມັຍນັ້ນ ພວກຊາວບ້ານຜູກແພແລ້ວແກ່ລົງແມ່ນ້ຳອຈິຣວດີ ເມື່ອເຊືອກຂາດ ໄມ້ທັງຫລາຍໄດ້ກະຈາຍໄປ ພວກພິກສຸມີໄຖຍຈິຕ ຄິດວ່າ ພວກເຈົ້າຂອງຈະເຫັນ ຈຶ່ງຊ່ວຍກັນຂົນໄມ້ຂຶ້ນຝັ່ງ ພວກເຈົ້າຂອງກ່າວຫາພິກສຸເຫລົ່ານັ້ນວ່າ "ພວກທ່ານບໍ່ເປັນພຣະ" ພວກພິກສຸເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ພວກທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໑໐໒)

## ເຣື່ອງຜ້າບັງສຸກຸລ ໑ ເຣື່ອງ

ສມັຍນັ້ນ ຄົນລ້ຽງໂຄຄົນນຶ່ງພາດຜ້າໄວ້ທີ່ຕົ້ນໄມ້ແລ້ວໄປຖ່າຍອຸຈຈາຣະ ພິກສຸຮູບນຶ່ງສຳຄັນວ່າເປັນຜ້າບັງສຸກຸລ ຈຶ່ງຖືເອົາໄປ ຄົນລ້ຽງໂຄກ່າວຫາພິກສຸນັ້ນວ່າ "ທ່ານບໍ່ເປັນພຣະ" ພິກສຸຮູບນັ້ນເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານສຳຄັນວ່າເປັນຜ້າບັງສຸກຸລ ບໍ່ຕ້ອງອາບັຕິ" (ເຣື່ອງທີ ໑໐໓)

## ເຣື່ອງຂ້າມນ້ຳ ໔ ເຣື່ອງ

ສມັຍນັ້ນ ຜ້າຜືນນຶ່ງຫລຸດຈາກມືພວກຊ່າງຍ້ອມໄປຄ້ອງຢູ່ທີ່ຕີນຂອງພິກສຸຮູບນຶ່ງຜູ້ກຳລັງຂ້າມນ້ຳ ທ່ານເກັບໄວ້ດ້ວຍຕັ້ງໃຈວ່າຈະນຳໄປຄືນໃຫ້ເຈົ້າຂອງ ພວກເຈົ້າຂອງກ່າວຫາພິກສຸນັ້ນວ່າ "ທ່ານບໍ່ເປັນພຣະ" ພິກສຸຮູບນັ້ນເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງ ຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ມີໄຖຍຈິຕ ບໍ່ຕ້ອງອາບັຕິ" (ເຣື່ອງທີ ໑໐໔)
ສມັຍນັ້ນ ຜ້າຜືນນຶ່ງຫລຸດຈາກມືພວກຊ່າງຍ້ອມໄປຄ້ອງຢູ່ທີ່ຕີນຂອງພິກສຸຮູບນຶ່ງຜູ້ກຳລັງຂ້າມນ້ຳ ທ່ານມີໄຖຍຈິຕຄິດວ່າ ພວກເຈົ້າຂອງຈະເຫັນ ໄດ້ຖືເອົາຜ້ານັ້ນໄປ ພວກເຈົ້າຂອງກ່າວຫາພິກສຸນັ້ນວ່າ "ທ່ານບໍ່ເປັນພຣະ" ພິກສຸຮູບນັ້ນເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳ

ເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເອື້ອງທີ ໑໐໕)

## ເອື້ອງສັ້ນທີລະນ້ອຍ ໑ ເອື້ອງ

[໑໕໕] ສມັຍນັ້ນ ພິກສຸຮູບນຶ່ງພົບຫມໍ້ເນີຍໃສຈຶ່ງສັ່ນເນີຍໃສເທື່ອລະຫນ້ອຍ ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິທຸກກຕ" ໑ (ເອື້ອງທີ ໑໐໖)

## ເອື້ອງຊັກຊວນກັນໄປລັກ ໔ ເອື້ອງ

ສມັຍນັ້ນ ພິກສຸຫລາຍຮູບຊັກຊວນກັນໄປດ້ວຍຄິດຈະລັກຊັພຍ໌ ພິກສຸຮູບນຶ່ງລັກຊັພຍ໌ມາໄດ້ ພິກສຸເຫລົ່ານັ້ນ ກ່າວຢ່າງນີ້ວ່າ "ພວກເຮົາບໍ່ເປັນປາຣາຊິກ ພິກສຸຮູບໃດລັກຊັພຍ໌ ພິກສຸຮູບນັ້ນເປັນປາຣາຊິກ" ແລ້ວນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ພວກທ່ານຕ້ອງອາບັຕິປາຣາ ຊິກ" (ເອື້ອງທີ ໑໐໗)
ສມັຍນັ້ນ ພິກສຸຫລາຍຮູບຊັກຊວນກັນໄປແລ້ວ ໄດ້ລັກຊັພຍ໌ມາ ແລ້ວແບ່ງກັນ ເມື່ອກຳລັງແບ່ງຊັພຍ໌ກັນ ພິກສຸແຕ່ລະຮູບໄດ້ສ່ວນແບ່ງບໍ່ຄົບ ໕ ມາສກ ພິກສຸເຫລົ່ານັ້ນຈຶ່ງບອກວ່າ "ພວກເຮົາບໍ່ເປັນປາຣາຊິກ" ແລ້ວນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ພວກທ່ານຕ້ອງອາບັຕິປາຣາຊິກ" (ເອື້ອງທີ ໑໐໘)

## ເອື້ອງກຳມືທີ່ກຸງສາວັຕຖີ ໔ ເອື້ອງ

ສມັຍນັ້ນ ກຸງສາວັຕຖີເກີດເຂົ້າຢາກຫມາກແພງ ພິກສຸຮູບນຶ່ງມີໄຖຍຈິຕ ໄດ້ລັກເຂົ້າສາຣຂອງຊາວຮ້ານຕລາດໄປ ໑ ກຳມື ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເອື້ອງທີ ໑໐໙)
ສມັຍນັ້ນ ກຸງສາວັຕຖີເກີດເຂົ້າຢາກຫມາກແພງ ພິກສຸຮູບນຶ່ງມີໄຖຍຈິຕ ໄດ້ລັກຖົ່ວຂຽວຂອງຊາວຮ້ານຕລາດໄປ ໑ ກຳມື ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິ

ປາຣາຊິກ" (ເຣື່ອງທີ ໑໑໐)
ສມັຍນັ້ນ ກຸງສາວັຕຖີເກີດເຂົ້າຍາກຫມາກແພງ ພິກສຸຮູບນຶ່ງມີໄຖຍຈິຕ ໄດ້ລັກຖົ່ວຣາຊມາສຂອງຊາວຮ້ານຕລາດໄປ ໑ ກຳມື ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໑໑໑)
ສມັຍນັ້ນ ກຸງສາວັຕຖີເກີດເຂົ້າຍາກຫມາກແພງ ພິກສຸຮູບນຶ່ງມີໄຖຍຈິຕ ໄດ້ລັກງາຂອງຊາວຮ້ານຕລາດໄປ ໑ ກຳມື ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໑໑໒)

## ເຣື້ອງຊີ້ນເປັນເດນ ໔ ເຣື່ອງ

ສມັຍນັ້ນ ພວກໂຈຣຂ້າໂຄ ກິນຊີ້ນແລ້ວ ລີ້ສ່ວນທີ່ເຫລືອໄວ້ໃນປ່າອັນທວັນ ເຂຕກຸງສາວັຕຖີແລ້ວພາກັນໄປ ພວກພິກສຸສຳຄັນວ່າເປັນຂອງບັງສຸກຸລ ຈຶ່ງໃຫ້ອນຸປສັມບັນຖືເອົາໄປເຮັດໃຫ້ສຸກແລ້ວສັນ ພວກໂຈຣກ່າວຫາພິກສຸເຫລົ່ານັ້ນວ່າ "ພວກທ່ານບໍ່ເປັນພຣະ" ພວກພິກສຸເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາ ຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ພວກທ່ານສຳຄັນວ່າເປັນຂອງບັງສຸກຸລ ບໍ່ຕ້ອງອາບັຕິ" (ເຣື່ອງທີ ໑໑໓)
ສມັຍນັ້ນ ພວກໂຈຣຂ້າຫມູ ກິນຊີ້ນແລ້ວ ລີ້ສ່ວນທີ່ເຫລືອໄວ້ໃນປ່າອັນທວັນ ເຂຕກຸງສາວັຕຖີແລ້ວພາກັນໄປ ພວກພິກສຸສຳຄັນວ່າເປັນຂອງບັງສຸກຸລ ຈຶ່ງໃຫ້ອນຸປສັມບັນຖືເອົາໄປເຮັດໃຫ້ສຸກແລ້ວສັນ ພວກໂຈຣກ່າວຫາພິກສຸເຫລົ່ານັ້ນວ່າ "ພວກທ່ານບໍ່ເປັນພຣະ" ພວກພິກສຸເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກ ຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ພວກທ່ານສຳຄັນວ່າເປັນຂອງບັງສຸກຸລ ບໍ່ຕ້ອງອາບັຕິ" (ເຣື່ອງທີ ໑໑໔)

## ເຣື້ອງຫຍ້າ ໔ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງໄປທີ່ທົ່ງຫຍ້າ ມີໄຖຍຈິຕ ໄດ້ລັກຫຍ້າທີ່ເຂົາກ່ຽວໄວ້ແລ້ວ ມີຣາຄາ ໕ ມາສກ ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລ

ພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໑໑໕)

ສມັຍນັ້ນ ພິກສຸຮູບນຶ່ງໄປທີ່ທ່າງຫຍ້າ ມີໄຖຍຈິຕ ໄດ້ລັກກ່ວງຫຍ້າ ມີຣາຄາ ໕ ມາສກ ໄປແລ້ວ ເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໑໑໖)

## ເຣື່ອງໃຫ້ແບ່ງຂອງສົງຄ໌ ໗ ເຣື່ອງ

[໑໕໖] ສມັຍນັ້ນ ພວກພິກສຸອາຄັນຕຸກະໃຫ້ແບ່ງຜົລຫມາກມ່ວງຂອງສົງຄ໌ແລ້ວຂົບສັນ ພວກພິກສຸເຈົ້າຖິ່ນ ກ່າວຫາພິກສຸເຫລົ່ານັ້ນວ່າ "ພວກທ່ານບໍ່ເປັນພຣະ" ພວກພິກສຸອາຄັນຕຸກະເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸທັງຫລາຍ ພວກທ່ານຄິດຢ່າງໃດ" "ພວກຂ້າພຣະພຸທຫເຈົ້າຕ້ອງການຈະສັນ ພຣະພຸທຫເຈົ້າຂ້າ" "ພິກສຸທັງຫລາຍພວກທ່ານຕ້ອງການຈະສັນ ບໍ່ຕ້ອງອາບັຕິ" (ເຣື່ອງທີ ໑໑໗)

ສມັຍນັ້ນ ພວກພິກສຸອາຄັນຕຸກະໃຫ້ແບ່ງຜົລຫມາກຫວ້າຂອງສົງຄ໌ແລ້ວຂົບສັນ ພວກພິກສຸເຈົ້າຖິ່ນກ່າວຫາພິກສຸເຫລົ່ານັ້ນວ່າ "ພວກທ່ານບໍ່ເປັນພຣະ" ພວກພິກສຸອາຄັນຕຸກະເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ພວກທ່ານຕ້ອງການຈະສັນ ບໍ່ຕ້ອງອາບັຕິ" (ເຣື່ອງທີ ໑໑໘)

ສມັຍນັ້ນ ພວກພິກສຸອາຄັນຕຸກະໃຫ້ແບ່ງຜົລຫມາກມີ້ສຳປະລໍຂອງສົງຄ໌ແລ້ວຂົບສັນ ພວກພິກສຸເຈົ້າຖິ່ນກ່າວຫາພິກສຸເຫລົ່ານັ້ນວ່າ "ພວກທ່ານບໍ່ເປັນພຣະ" ພວກພິກສຸອາຄັນຕຸກະເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ພວກທ່ານຕ້ອງການຈະສັນ ບໍ່ຕ້ອງອາບັຕິ" (ເຣື່ອງທີ ໑໑໙)

ສມັຍນັ້ນ ພວກພິກສຸອາຄັນຕຸກະໃຫ້ແບ່ງຜົລຫມາກມີ້ຂອງສົງຄ໌ແລ້ວຂົບສັນ ພວກພິກສຸເຈົ້າຖິ່ນກ່າວຫາພິກສຸເຫລົ່ານັ້ນວ່າ "ພວກທ່ານບໍ່ເປັນພຣະ" ພວກພິກສຸອາຄັນຕຸກະເກີດຄວາມກັງວົລ ໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ພວກທ່ານຕ້ອງການຈະສັນ ບໍ່ຕ້ອງອາບັຕິ" (ເຣື່ອງທີ ໑໒໐)

ສມັຍນັ້ນ ພວກພິກສຸອາຄັນຕຸກະໃຫ້ແບ່ງຜົລຫມາກຕາລສຸກຂອງສົງຄ໌ແລ້ວຂົບສັນ ພວກພິກສຸເຈົ້າຖິ່ນກ່າວຫາພິກສຸເຫລົ່ານັ້ນວ່າ "ພວກທ່ານບໍ່ເປັນພຣະ" ພວກພິກສຸອາຄັນຕຸກະເກີດຄວາມກັງວົລໃຈ

ວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ພວກທ່ານຕ້ອງກາຣຈະສັນບໍ່ຕ້ອງອາບັຕິ" (ເຣື້ອງທີ ໑໔໑) ສມັຍນັ້ນ ພວກພິກສຸອາຄັນຕຸກະໃຫ້ແບ່ງຕົ້ນອ້ອຍຂອງສົງຂ໌ແລ້ວຂົບສັນ ພວກພິກສຸເຈົ້າຖິ່ນກ່າວຫາພິກສຸເຫລົ່ານັ້ນວ່າ "ພວກທ່ານບໍ່ເປັນພຣະ" ພວກພິກສຸອາຄັນຕຸກະເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ພວກທ່ານຕ້ອງກາຣຈະສັນບໍ່ຕ້ອງອາບັຕິ" (ເຣື້ອງທີ ໑໔໔)

ສມັຍນັ້ນ ພວກພິກສຸອາຄັນຕຸກະໃຫ້ແບ່ງຜົລຫມາກພລັບຂອງສົງຂ໌ແລ້ວຂົບສັນ ພວກພິກສຸເຈົ້າຖິ່ນກ່າວຫາພິກສຸເຫລົ່ານັ້ນວ່າ "ພວກທ່ານບໍ່ເປັນພຣະ" ພວກພິກສຸອາຄັນຕຸກະເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ພວກທ່ານຕ້ອງກາຣຈະສັນ ບໍ່ຕ້ອງອາບັຕິ" (ເຣື້ອງທີ ໑໔໓)

## ເຣື້ອງບໍ່ແມ່ນເຈົ້າຂອງ ໗ ເຣື້ອງ

ສມັຍນັ້ນ ພວກຄົນເຝົ້າສວນຫມາກມ່ວງໄດ້ຖວາຍຜົລຫມາກມ່ວງແກ່ພິກສຸທັງຫລາຍ ພວກພິກສຸມີຄວາມກຽດຊັງວ່າ ຊົນເຫລົ່ານີ້ມີຫນ້າທີ່ເຝົ້າ ບໍ່ມີສິທທິ໌ຈະຖວາຍ ຈຶ່ງບໍ່ຍອມຮັບແລ້ວນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍບໍ່ຕ້ອງອາບັຕິ ເພາະຄົນເຝົ້າຖວາຍ" (ເຣື້ອງທີ ໑໔໔)

ສມັຍນັ້ນ ພວກຄົນເຝົ້າສວນຫວ້າໄດ້ຖວາຍຜົລຫວ້າແກ່ພິກສຸທັງຫລາຍ ພວກພິກສຸມີຄວາມກຽດຊັງວ່າ ຊົນເຫລົ່ານີ້ມີຫນ້າທີ່ເຝົ້າ ບໍ່ມີສິທທິ໌ຈະຖວາຍ ຈຶ່ງບໍ່ຍອມຮັບແລ້ວນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄ ໃຫ້ ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ບໍ່ຕ້ອງອາບັຕິ ເພາະຄົນເຝົ້າຖວາຍ" (ເຣື້ອງທີ ໑໔໕)

ສມັຍນັ້ນ ພວກຄົນເຝົ້າສວນຫມາກມີ້ສຳປະລໍໄດ້ຖວາຍຜົລຫມາກມີ້ສຳປະລໍແກ່ພິກສຸທັງຫລາຍ ພວກພິກສຸມີຄວາມກຽດຊັງວ່າ ຊົນເຫລົ່ານີ້ມີຫນ້າທີ່ເຝົ້າ ບໍ່ມີສິທທິ໌ຈະຖວາຍ ຈຶ່ງບໍ່ຍອມຮັບແລ້ວນຳເຣື້ອງໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ບໍ່ຕ້ອງອາບັຕິ ເພາະຄົນເຝົ້າຖວາຍ" (ເຣື້ອງທີ ໑໔໖)

ສມັຍນັ້ນ ພວກຄົນເຝົ້າສວນຫມາກມີ້ໄດ້ຖວາຍຜົລຫມາກມີ້ແກ່ພິກສຸທັງຫລາຍ ພວກພິກສຸມີຄວາມກຽດຊັງວ່າ ຊົນເຫລົ່ານີ້ມີຫນ້າທີ່ເຝົ້າ ບໍ່ມີສິທທິ໌ຈະຖວາຍ ຈຶ່ງບໍ່ຍອມຮັບແລ້ວນຳເຣື້ອງນີ້ໄປຂາບ

ທູລພຣະຜູ້ມີພຣະພາຄ ໃຫ້ ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ບໍ່ຕ້ອງອາບັຕິ ເພາະຄົນເຝົ້າຖວາຍ" (ເຣື່ອງທີ ໑໔໗)

ສມັຍນັ້ນ ພວກຄົນເຝົ້າສວນຕາລສຸກໄດ້ຖວາຍຜົລຕາລສຸກແກ່ພິກສຸທັງຫລາຍ ພວກພິກສຸມີຄວາມກຽດຊັງວ່າ ຊົນເຫລົ່ານີ້ມີຫນ້າທີ່ເຝົ້າ ບໍ່ມີສິທທິ໌ຈະຖວາຍ ຈຶ່ງບໍ່ຍອມຮັບແລ້ວນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄ ໃຫ້ ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍບໍ່ຕ້ອງອາບັຕິ ເພາະຄົນເຝົ້າຖວາຍ" (ເຣື່ອງທີ ໑໔໘)

ສມັຍນັ້ນ ພວກຄົນເຝົ້າໄຮ່ອ້ອຍໄດ້ຖວາຍລຳອ້ອຍແກ່ພິກສຸທັງຫລາຍ ພວກພິກສຸມີຄວາມກຽດຊັງວ່າ ຊົນເຫລົ່ານີ້ມີຫນ້າທີ່ເຝົ້າ ບໍ່ມີສິທທິ໌ຈະຖວາຍ ຈຶ່ງບໍ່ຍອມຮັບແລ້ວນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄ ໃຫ້ ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ບໍ່ຕ້ອງອາບັຕິ ເພາະຄົນເຝົ້າຖວາຍ" (ເຣື່ອງທີ ໑໔໙)

ສມັຍນັ້ນ ພວກຄົນເຝົ້າສວນຫມາກພລັບໄດ້ຖວາຍຜົລຫມາກພລັບແກ່ພິກສຸທັງຫລາຍ ພວກພິກສຸມີຄວາມກຽດຊັງວ່າ ຊົນເຫລົ່ານີ້ມີຫນ້າທີ່ເຝົ້າ ບໍ່ມີສິທທິ໌ຈະຖວາຍ ຈຶ່ງບໍ່ຍອມຮັບແລ້ວນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ບໍ່ຕ້ອງອາບັຕິ ເພາະຄົນເຝົ້າຖວາຍ" (ເຣື່ອງທີ ໑໕໐)

## ເຣື່ອງຢືມໄມ້ຂອງສົງຄ໌ ໑ ເຣື່ອງ

ສມັຍນັ້ນ ພິກສຸຮູບນຶ່ງໄດ້ຢືມໄມ້ຂອງສົງຄ໌ໄປຄ້ຳຝາວິຫາຣ ພິກສຸທັງຫລາຍກ່າວຫາພິກສຸນັ້ນວ່າ "ທ່ານບໍ່ເປັນພຣະ" ພິກສຸຮູບນັ້ນເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ"ພິກສຸ ທ່ານຄິດຢ່າງໃດ" "ຂ້າພຣະພຸທທເຈົ້າ ຕ້ອງກາຣຈະຂໍຢືມ ພຣະພຸທທເຈົ້າຂ້າ" "ພິກສຸທ່ານບໍ່ຕ້ອງອາບັຕິ ເພາະຂໍຢືມ" (ເຣື່ອງທີ ໑໕໑)

## ເຣື່ອງລັກນ້ຳຂອງສົງຄ໌ ໑ ເຣື່ອງ

ສມັຍນັ້ນ ພິກສຸຮູບນຶ່ງມີໄຖຍຈິຕ ໄດ້ລັກນ້ຳຂອງສົງຄ໌ ແລ້ວເກີດຄວາມກັງວົລໃຈວ່າເຮົາຕ້ອງອາບັຕິປາຣາຊິກ ຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໑໕໔)

## ເຣື້ອງລັກດິນຂອງສົງຂ໌ ໑ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງມີໄຖຍຈິຕ ໄດ້ລັກດິນຂອງສົງຂ໌ ແລ້ວເກີດຄວາມກັງວົລໃຈວ່າເຮົາຕ້ອງ ອາບັຕິປາຣາຊິກ ຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໑໖໓)

## ເຣື້ອງລັກຫຍ້າຂອງສົງຂ໌ ໔ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງມີໄຖຍຈິຕ ໄດ້ລັກຫຍ້າມຸງກະຕ່າຍຂອງສົງຂ໌ ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໑໖໔)

ສມັຍນັ້ນ ພິກສຸຮູບນຶ່ງມີໄຖຍຈິຕ ໄດ້ເຜົາຫຍ້າມຸງກະຕ່າຍຂອງສົງຂ໌ ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິທຸກກຕ" (ເຣື້ອງທີ ໑໖໕)

## ເຣື້ອງລັກເສນາສນະຂອງສົງຂ໌ ໗ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງມີໄຖຍຈິຕ ໄດ້ລັກຕຽງຂອງສົງຂ໌ ແລ້ວເກີດຄວາມກັງວົລໃຈວ່າເຮົາຕ້ອງ ອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໑໖໖)

ສມັຍນັ້ນ ພິກສຸຮູບນຶ່ງມີໄຖຍຈິຕ ໄດ້ລັກຕັ່ງຂອງສົງຂ໌ ແລ້ວເກີດຄວາມກັງວົລໃຈວ່າເຮົາຕ້ອງ ອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໑໖໗)

ສມັຍນັ້ນ ພິກສຸຮູບນຶ່ງມີໄຖຍຈິຕ ໄດ້ລັກເສື່ອຂອງສົງຂ໌ ແລ້ວເກີດຄວາມກັງວົລໃຈວ່າເຮົາຕ້ອງ ອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໑໖໘)

ສມັຍນັ້ນ ພິກສຸຮູບນຶ່ງມີໄຖຍຈິຕ ໄດ້ລັກຫມອນຂອງສົງຂ໌ ແລ້ວເກີດຄວາມກັງວົລໃຈວ່າເຮົາຕ້ອງ ອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໑໖໙)

ສມັຍນັ້ນ ພິກສຸຮູບນຶ່ງມີໄຖຍຈິຕ ໄດ້ລັກບານປະຕູຂອງສົງຊ໌ ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໑໔໐)

ສມັຍນັ້ນ ພິກສຸຮູບນຶ່ງມີໄຖຍຈິຕ ໄດ້ລັກບານຫນ້າຕ່າງຂອງສົງຊ໌ ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໑໔໑)

ສມັຍນັ້ນ ພິກສຸຮູບນຶ່ງມີໄຖຍຈິຕ ໄດ້ລັກໄມ້ກອນຂອງສົງຊ໌ ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໑໔໔)

## ເຣື່ອງຂອງມີເຈົ້າຂອງບໍ່ຄວຣນຳໄປໃຊ້ ໑ ເຣື່ອງ

[໑໕໗] ສມັຍນັ້ນ ພິກສຸທັງຫລາຍໄດ້ນຳເສນາສນະເຄື່ອງໃຊ້ສອຍປະຈຳໃນວິຫາຣຂອງອຸບາສົກຄົນນຶ່ງໄປໃຊ້ສອຍທີ່ອື່ນ ອຸບາສົກນັ້ນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະຄຸນເຈົ້າທັງຫລາຍຈຶ່ງນຳເຄື່ອງໃຊ້ສອຍປະຈຳໃນທີ່ແຫ່ງນຶ່ງ ໄປໃຊ້ໃນທີ່ອີກແຫ່ງນຶ່ງງລະ" ພິກສຸທັງຫລາຍ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ເຄື່ອງໃຊ້ສອຍໃນທີ່ແຫ່ງນຶ່ງ ບໍ່ເພິ່ງນຳໄປໃຊ້ສອຍໃນທີ່ອີກແຫ່ງນຶ່ງ ພິກສຸໃດເພິ່ງໃຊ້ສອຍ ຕ້ອງອາບັຕິທຸກກຕ" (ເຣື່ອງທີ ໑໔໓)

## ເຣື່ອງຂອງມີເຈົ້າຂອງຄວຣຂໍຢືມ ໑ ເຣື່ອງ

ສມັຍນັ້ນ ພິກສຸທັງຫລາຍກຽດຊັງການນຳເສນາສນະເຄື່ອງໃຊ້ສອຍໄປໂຮງອຸໂບສົຖແດ່ ທີ່ປະຊຸມແດ່ ຈຶ່ງນັ່ງເທິງພື້ນດິນ ເນື້ອຕົວແລະຈີວອນຈຶ່ງເປື້ອນຝຸ່ນ ພິກສຸທັງຫລາຍ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ນຳໄປໃຊ້ໄດ້ຊົ່ວຄາວ" (ເຣື່ອງທີ ໑໔໔)

## ເຣື່ອງພິກສຸມີຊາວກຸງຈຳປາ ໑ ເຣື່ອງ

ສມັຍນັ້ນ ພິກສຸນີຜູ້ເປັນອັນເຕວາສີນີຂອງພິກສຸນີຖຸລລນັນທາ ໄປຍັງຕະກູນອຸປັຕຖາກຂອງພິກສຸນີຖຸລລນັນທາ ໃນກຸງຈັມປາ ບອກຄົນໃນຕະກູນວ່າ "ພິກສຸນີຖຸລລນັນທາປະສົງຄ໌ຈະດື່ມຢາຄູປຸງດ້ວຍຂອງ ໓ ຢ່າງ" ເມື່ອເຂົາຫຸງຫາໃຫ້ແລ້ວທ່ານກັບນຳໄປສັນເສັງເອງ ພິກສຸນີຖຸລລນັນທາຮູ້ເຂົ້າຈຶ່ງກ່າວຫາພິກສຸນີນັ້ນວ່າ "ທ່ານບໍ່ເປັພຣະ" ພິກສຸນີນັ້ນເກີດຄວາມກັງວົລໃຈຈຶ່ງບອກຄວາມນັ້ນແກ່ພິກສຸນີທັງຫລາຍ ພວກພິກສຸນີຈຶ່ງບອກແກ່ພິກສຸ
ທັງຫລາຍ ພວກພິກສຸໄດ້ນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ພິກສຸນີນັ້ນບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິປາຈິຕຕີຍ໌ ເພາະກ່າວເທັຈທັງທີ່ຮູ້" (ເຣື່ອງທີ ໑໔໕)

## ເຣື້ອງພິກສຸນີຊາວກຸງຣາຊຄຶຫ໌ ໑ ເຣື້ອງ

ສມັຍນັ້ນ ພິກສຸນີຜູ້ເປັນອັນເຕວາສີນີຂອງພິກສຸນີຖຸລລນັນທາ ໄປຍັງຕະກູນອຸປັຕຖາກຂອງພິກສຸນີຖຸລລນັນທາໃນກຸງຣາຊຄຶຫ໌ ບອກຄົນໃນຕະກູນວ່າ "ພິກສຸນີຖຸລລນັນທາປະສົງຄ໌ຈະສັນຂນົມຣອງເຜິ້ງ" ເມື່ອສັ່ງໃຫ້ເຂົາທອດແລ້ວທ່ານກັບນຳໄປສັນເສັງເອງພິກສຸນີຖຸລລນັນທາຮູ້ເຂົ້າຈຶ່ງກ່າວຫາພິກສຸນີນັ້ນວ່າ "ທ່ານບໍ່ເປັນພຣະ" ພິກສຸນີນັ້ນເກີດຄວາມກັງວົລໃຈຈຶ່ງບອກຄວາມນັ້ນແກ່ພິກສຸນີທັງຫລາຍ ພວກພິກສຸນີຈຶ່ງບອກແກ່ພິກສຸທັງຫລາຍ ພວກພິກສຸໄດ້ນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ພິກສຸນີນັ້ນບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິປາຈິຕຕີຍ໌ ເພາະກ່າວເທັຈທັງທີ່ຮູ້" (ເຣື່ອງທີ ໑໔໖)

## ເຣື້ອງພຣະອັຊຊຸກະຊາວກຸງເວສາລີ ໑ ເຣື້ອງ

[໑໕໗] ຄຫບໍດີຜູ້ເປັນອຸປັຕຖາກຂອງພຣະອັຊຊຸກະ ໃນກຸງເວສາລີ ມີບຸຕຣ ໑ ຄົນ ຫລານ ໑ ຄົນ ຕໍ່ມາ ເຂົາສັ່ງເສັງທ່ານພຣະອັຊຊຸກະວ່າ "ທ່ານເພິງບອກທີ່ຝັງຊັພຍ໌ແກ່ເດັກຜູ້ມີສັດທາເຫລື້ອມໃສໃນຈຳນວນເດັກ ໔ ຄົນນີ້" ແລ້ວເຖິງແກ່ກັມ ເວລານັ້ນປາກົດວ່າຫລານຊາຍຂອງຄຫບໍດີເປັນຜູ້ມີສັດທາເຫລື້ອມໃສ ທ່ານພຣະອັຊຊຸກະຈຶ່ງບອກທີ່ຝັງຊັພຍ໌ແກ່ທ່ານ ທ່ານນຳຊັພຍ໌ສົມບັຕມາຕັ້ງເປັນກອງທຸນແລະເລັ້ມໃຫ້ທານ ຕໍ່ມາບຸຕຣຂອງຄຫບໍດີນັ້ນ ໄດ້ຮຽນຖາມທ່ານພຣະອານົນທ໌ວ່າ "ພຣະຄຸນເຈົ້າອານົນທ໌ ໃຜເປັນທາຍາທຂອງພໍ່ ລູກຫລືຫລານ" "ທັມດາລູກຕ້ອງເປັນທາຍາທຂອງພໍ່" "ທ່ານຂນ້ອຍ ພຣະຄຸນເຈົ້າອັຊຊຸກະບອກຊັພຍ໌ສົມບັຕຂອງຜູ້ຂ້າແກ່ຄູ່ແຂ່ງຂອງຜູ້ຂ້າໄປແລ້ວ" "ໂຍມ ທ່ານພຣະອັຊຊຸກະບໍ່ເປັນພຣະ"

ລຳດັບນັ້ນ ທ່ານພຣະອັຊຊຸກະກ່າວກັບທ່ານພຣະອານົນທ໌ວ່າ "ທ່ານອານົນທ໌ ທ່ານໂປດໃຫ້ການວິນິຈສັຍແກ່ຜູ້ຂ້າເຖີດ ຂນ້ອຍ" ທ່ານພຣະອຸບາລີຢູ່ຝ່າຍພຣະອັຊຊຸກະ ຖາມພຣະອານົນທ໌ວ່າ "ທ່ານອານົນທ໌ ພິກສຸຮຸບໃດບອກຂຸມຊັພຍ໌ແກ່ບຸຄຄົລຕາມທີ່ເຈົ້າຂອງສັ່ງໃຫ້ບອກ ພິກສຸຮູບນັ້ນຈະຕ້ອງອາບັຕິຫຍັງ"

ທ່ານພຣະອານົນທ໌ຕອບວ່າ "ພິກສຸນັ້ນຈະບໍ່ຕ້ອງອາບັຕິຫຍັງເລີຍ ໂດຍທີ່ສຸດແມ່ນແຕ່ອາບັຕິທຸກກຕ"

ທ່ານພຣະອຸບາລີຈຶ່ງກ່າວວ່າ "ພຣະອັຊຊຸກະນີ້ອັນເຈົ້າຂອງຊັພຍ໌ສັ່ງໄວ້ວ່າ ທ່ານໂປດບອກທີ່ຝັງຊັພຍ໌ນີ້ແກ່ບຸຄຄົລຊື່ນີ້ ຈຶ່ງໄດ້ບອກແກ່ຜູ້ນັ້ນ ດັ່ງນັ້ນພຣະອັຊຊຸກະຈຶ່ງບໍ່ຕ້ອງອາບັຕິ" (ເຣື່ອງທີ ໑໔໗)

## ເຣື່ອງທາຣົກຊາວກຸງພາຣານສີ ໑ ເຣື່ອງ

[໑໕໙] ຕະກູນອຸປັຕຖາກຂອງທ່ານພຣະປິລິນທວັຈສະໃນກຸງພາຣານສີ ຖືກໂຈຣປຸ້ນແລະພາເດັກໄປ ໒ ຄົນ ຕໍ່ມາ ທ່ານພຣະປິລິນທວັຈສະຊ່ວຍນຳເດັກຫນີອອກມາໄວ້ທີ່ປຣາສາທດ້ວຍອິທທິຣິທທິ໌ ຊາວບ້ານເຫລື້ອມໃສວ່າ ນີ້ເປັນອິທທານຸພາພຂອງທ່ານພຣະປິລິນທວັຈສະໂດຍແທ້ ພິກສຸທັງຫລາຍຈຶ່ງຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດທ່ານປິລິນທວັຈສະຈຶ່ງນຳເດັກທີ່ພວກໂຈຣພາຕົວໄປມາລະ" ແລ້ວນຳເຣື່ອງນີ້ໄປຂາບທູລພຣະຜູ້ມີ

ພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ພິກສຸຜູ້ມີຣິທທິ໌ບໍ່ຕ້ອງອາບັຕິເພາະວິສັຍແຫ່ງຣິທທິ໌" (ເຣື່ອງທີ ໑໔໘)

## ເຣື່ອງພິກສຸຊາວກຸງໂກສັມພີ ໑ ເຣື່ອງ

[໑໖໐] ສມັຍນັ້ນ ພຣະປັນທຸກະແລະພຣະກປິລະເປັນເພື່ອນກັນ ຮູບນຶ່ງຢູ່ໃນອາວາສໃກ້ຫມູ່ບ້ານອີກຮູບນຶ່ງຢູ່ໃນກຸງໂກສັມພີ ຕໍ່ມາເພື່ອນພິກສຸຜູ້ຢູ່ໃນຫມູ່ບ້ານເດີນທາງຈາກຫມູ່ບ້ານໄປກຸງໂກສັມພີຣະຫວ່າງທາງ ຂ້າມແມ່ນ້ຳ ແປ່ວມັນຂົ້ນທີ່ຫລຸດຈາກມືຂອງພວກຄົນຂ້າຫມູລອຍມາຕິດທີ່ຕີນ ທ່ານຈຶ່ງເກັບໄວ້ດ້ວຍຕັ້ງໃຈວ່າຈະໃຫ້ຄືນແກ່ເຈົ້າຂອງ ພວກເຈົ້າຂອງກ່າວຫາພິກສຸນັ້ນວ່າ "ທ່ານບໍ່ເປັນພຣະ" ຍິງລ້ຽງໂຄຄົນນຶ່ງພົບທ່ານຂ້າມນ້ຳຈຶ່ງໄດ້ກ່າວກັບທ່ານດັ່ງນີ້ວ່າ "ທ່ານ ນິມົນຕ໌ມາເສພເມຖຸນທັມກັນເຖີດ ຂະນ້ອຍ" ທ່ານຄິດວ່າ ແມ່ນຕາມປົກຕິ ເຮົາກໍບໍ່ເປັນພຣະຢູ່ແລ້ວ ຈຶ່ງເສພເມຖຸນທັມກັບຍິງລ້ຽງໂຄ ແລ້ວເດີນທາງເຖິງກຸງໂກສັມພີ ລະເຣື່ອງນັ້ນໃຫ້ພິກສຸທັງຫລາຍຟັງ ພວກພິກສຸຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງ

ຫລາຍ ພິກສຸນັ້ນບໍ່ຕ້ອງອາບັຕິ ປາຣາຊິກເພາະຖືເອົາສິ່ງຂອງທີ່ເຈົ້າຂອງບໍ່ໄດ້ໃຫ້ ແຕ່ຕ້ອງອາບັຕິປາຣາຊິກເພາະເສພເມຖຸນທັມ" (ເຣື້ອງທີ ໑໔໙)

ເຣື້ອງສັທທິວິຫາຣິກຂອງພຣະທັຣຣຫິກະກຸງສາຄລະ ໑ ເຣື້ອງ

[໑໕໑] ສມັຍນັ້ນ ພິກສຸສັທທິວິຫາຣິກຂອງທ່ານພຣະທັຣຣຫິກະ ກຸງສາຄລະ ຢາກຈະສິກຈຶ່ງໄປລັກຜ້າໂພກຂອງຊາວຮ້ານຕລາດມາແລ້ວ ໄດ້ກ່າວກັບທ່ານພຣະທັຣຣຫິກະດັ່ງນີ້ວ່າ "ຜູ້ຂ້າບໍ່ເປັນພຣະເສັງແລ້ວຈັກສິກລ່ະ ຂນ້ອຍ" "ທ່ານທຳຜິດຫຍັງລະ" "ຜູ້ຂ້າລັກຜ້າໂພກຂອງຊາວຮ້ານຕລາດ" ທ່ານພຣະທັຣຣຫິກະໃຫ້ນຳຜ້ານັ້ນມາຕີຣາຄາ ຣາຄາຜ້າບໍ່ເຖິງ ໕ ມາສກ ທ່ານພຣະທັຣຣຫິກະກ່າວວ່າ "ທ່ານບໍ່ຕ້ອງອາບັຕິປາຣາຊິກ" ແລ້ວໄດ້ສະແດງທັມມີກຖາໃຫ້ຟັງ ພິກສຸນັ້ນຍິນດີຍິ່ງ (ເຣື້ອງທີ ໑໕໐)

ປາຣາຊິກສິກຂາບົທທີ ໒ ຈົບ

ປາຣາຊິກສິກຂາບົທທີ ໓
ວ່າດ້ວຍການພາກກາຍມນຸສຍ໌
ເຣື້ອງຫມູ່ພິກສຸຜູ້ຈະເຈີນອສຸພກັມມັຕຖານກັບຕາເຖນມິຄລັນທິກະ

[໑໕໒] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ກູຕາຄາຣສາລາ ໃນປ່າມຫາວັນ ເຂຕກຸງເວສາລີ ຄັ້ງນັ້ນ ພຣະຜູ້ມີພຣະພາຄຕຣັສສອນອສຸພກັມມັຕຖານ ຊົງພັນນາຄຸນອສຸພກັມມັຕຖານ ຕຣັສສັຣເສີນການຈະເຣີນອສຸພກັມມັຕຖານ ຕຣັສພັນນາຄຸນອສຸພສມາບັຕິເນືອງໆ ແກ່ພິກສຸທັງຫລາຍ ໂດຍປະການຕ່າງໆ

ຕໍ່ມາ ພຣະຜູ້ມີພຣະພາຄຕຣັສຮຽກພິກສຸທັງຫລາຍມາຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາປຣາຖນາຈະຫລີກຫລີບຢູ່ຜູ້ດຽວຈັກເຄິ່ງເດືອນ ໃຜໆຢ່າເຂົ້າໄປຫາເຮົາ ຍົກເວັ້ນພິກສຸຜູ້ນຳພັຕຕາຫານເຂົ້າໄປໃຫ້ຮູບດຽວ"

ພິກສຸທັງຫລາຍຮັບສນອງພຣະພຸທທດຳຣັສວ່າ "ໄດ້ພຣະພຸທທເຈົ້າຂ້າ" ບໍ່ມີໃຜເຂົ້າໄປເຝົ້າພຣະຜູ້ມີພຣະພາຄ ນອກຈາກພິກສຸຜູ້ນຳພັຕຕາຫານເຂົ້າໄປທູລຖວາຍຮູບດຽວ ພິກສຸທັງຫລາຍສົນທນາກັນວ່າ "ພຣະຜູ້ມີພຣະພາຄຕຣັສສອນອສຸພກັມມັຕຖານ ຊົງພັນນາຄຸນອສຸພກັມມັຕຖານ ຕຣັສສັຣເສີນການຈະເຣີນອສຸພກັມມັຕຖານ ຕຣັສພັນນາຄຸນອສຸພສມາບັຕິເນືອງໆ ແກ່ພິກສຸທັງຫລາຍໂດຍປະການຕ່າງໆ" ແລ້ວພາກັນປະກອບຄວາມພຽນໃນການຈະເຣີນອສຸພກັມມັຕຖານຫລາຍປະການ ຈົນ

ເມື່ອເກີດຄວາມຮູ້ສຶກອຶດອັດເບື່ອຫນ່າຍ ກຽດຊັງຮ່າງກາຍຂອງຕົນ ເຫມືອນຊາຍຫລືຍິງທີ່ເປັນຫນຸ່ມເປັນສາວມັກແຕ່ງຕົວ ອາບນ້ຳ ສຣະກະມ່ອມ ມີຊາກສົບງູ ຊາກສົບ ສຸນັກຫລືຊາກສົບມນຸສຍ໌ມາຕິດຢູ່ທີ່ຄໍ ເກີດຄວາມຮູ້ສຶກອຶດອັດ ເບື່ອຫນ່າຍ ກຽດຊັງ ພິກສຸເຫລົ່ານັ້ນຈຶ່ງຂ້າຕົວຕາຍເອງແດ່ ໃຊ້ກັນແລະກັນໃຫ້ຂ້າແດ່ ພິກສຸບາງກຸ່ມພາກັນເຂົ້າໄປຫາຕາເຖນມິຄລັນທິກະ ບອກວ່າ "ຂໍໂອກາສແດ່ທ້ອນ ທ່ານຊ່ອຍຂ້າພອກອາຕມາເຖີດ ບາຕຣແລະຈີວອນນີ້ຈັກເປັນຂອງທ່ານ" ຕາເຖນມິຄລັນທິກະຮັບຈ້າງເອົາບາຕຣແລະຈີວອນຈຶ່ງຂ້າພິກສຸມາກມາຍ ຖືດາບເປື້ອນເລືອດຍ່າງໄປເຖິງແມ່ນ້ຳວັຄຄຸມຸທາ

[໑໘໓] ເມື່ອຕາເຖນມິລັນທິກະກຳລັງລ້າງດາບເປື້ອນເລືອດຢູ່ ໄດ້ມີຄວາມກັງວົລໃຈເດືອດຮ້ອນໃຈວ່າ ບໍ່ແມ່ນລາພຂອງເຮົານໍ ເຮົາບໍ່ມີລາພນໍ ເຮົາໄດ້ຊົ່ວແລ້ວນໍ ເຮົາໄດ້ບໍ່ດີນໍ ເຮົາໄດ້ສ້າງບາປໄວ້ມາກທີ່ໄດ້ຂ້າພິກສຸຜູ້ມີສີລມີກັລຍານທັມ ຂນະນັ້ນເທວດາຜູ້ນັບເນື່ອງໃນຫມູ່ມາຣຕົນນຶ່ງ ຍ່າງມາເທິງຜີວນ້ຳບໍ່ແຕກເຕັ້ນຊະ ກ່າວວ່າ "ດີແລ້ວ ໆ ທ່ານສັຕບຸຣຸສ ເປັນລາພເປັນໂຊຄຂອງທ່ານທ່ານໄດ້ສ້າງສົມບຸນໄວ້ຫລາຍທີ່ໄດ້ຊ່ອຍສົ່ງຄົນທີ່ຍັງບໍ່ພົ້ນທຸກຂ໌ໃຫ້ຂ້າມພົ້ນທຸກຂ໌ໄດ້" ຄັນຕາເຖນມິຄລັນທິກະໄດ້ຊາບວ່າ ເປັນລາພເປັນໂຊຄຂອງເຮົາ ເຮົາໄດ້ສ້າງສົມບຸນໄວ້ຫລາຍທີ່ໄດ້ຊ່ອຍສົ່ງ ຄົນທີ່ຍັງບໍ່ພົ້ນທຸກຂ໌ໃຫ້ຂ້າມພົ້ນທຸກຂ໌ໄດ້ ຈຶ່ງຖືດາບຄົມເຂົ້າໄປບໍຣິເວນວິຫາຣກ່າວວ່າ "ໃຜທີ່ຍັງບໍ່ພົ້ນທຸກຂ໌ ຂ້າພະເຈົ້າຈະຊ່ອຍໃຫ້ໃຜພົ້ນທຸກຂ໌ໄດ້ແດ່" ໃນພິກສຸເຫລົ່ານັ້ນ ພວກພິກສຸຜູ້ຍັງມີຣາຄະ ເກີດຄວາມຫວາດຢ້ານຂົນຫົວລຸກ ສ່ວນພວກພິກສຸຜູ້ທີ່ບໍ່ມີຣາຄະ ຍ່ອມບໍ່ຫວາດຢ້ານບໍ່ຂົນຫົວລຸກ ເວລານັ້ນ ເຂົາຂ້າພິກສຸວັນລະ ໑ ຮູບແດ່ ໒ ຮູບແດ່ ໓ ຮູບແດ່ ໔ ຮູບແດ່ ໕ ຮູບແດ່ ໖ ຮູບແດ່ ໗ ຮູບແດ່ ໘ ຮູບແດ່ ໙ ຮູບແດ່ ໑໐ ຮູບແດ່ ໒໐ ຮູບແດ່ ໓໐ ຮູບແດ່ ໔໐ ຮູບແດ່ ໕໐ ຮູບແດ່ ໖໐ ຮູບແດ່

## ຮັບສັ່ງໃຫ້ຜດຽງ(ຮຽກປະຊຸມ)ສົງຂ໌

[໑໘໔] ເມື່ອເຄິ່ງເດືອນຜ່ານໄປ ພຣະຜູ້ມີພຣະພາຄສເດັຈອອກຈາກທີ່ຫລີກຫລົບ ຕຣັສຮຽກທ່ານພຣະອານົນທ໌ມາຕຣັສຖາມວ່າ "ອານົນທ໌ ເປັນຫຍັງ ພິກສຸສົງຂ໌ຈຶ່ງເບິ່ງຄືຫນ້ອຍລົງ" ທ່ານພຣະອານົນທ໌ຂາບທູລວ່າ "ຈິງພຣະພຸທທເຈົ້າຂ້າ ພຣະຜູ້ມີພຣະພາຄຕຣັສສອນອສຸພກັມມັຕຖານ ຊົງພັນນາຄຸນອສຸພກັມມັຕຖານ ຕຣັສສັຣເສີນກາຣຈະເຣີນອສຸພກັມມັຕຖານ ຕຣັສພັນນາຄຸນອສຸພສມາບັຕິເນືອງໆ ແກ່ພິກສຸທັງຫລາຍໂດຍປະກາຣຕ່າງໆ ແລະພິກສຸເຫລົ່ານັ້ນກ່າວວ່າ 'ພຣະຜູ້ມີພຣະພາຄຕຣັສສອນອສຸພກັມມັຕຖານ ຊົງພັນນາຄຸນອສຸພກັມມັຕຖານ ຕຣັສສັຣເສີນກາຣຈະເຣີນອສຸພ

ກັມມັຕຖານ ຕຣັສພັນນາອສຸພສມາບັຕິເນືອງ ໆ ໂດຍປະການຕ່າງໆ’ ຈຶ່ງພາກັນປະກອບຄວາມພຽນໃນການຈະເຣີນອສຸພກັມມັຕຖານຫລາຍປະການ ຈົນເມື່ອເກີດຄວາມຮູ້ສຶກອຶດອັດ ເບື່ອຫນ່າຍ ກຽດຊັງຮ່າງກາຍຂອງຕົນ ເຫມືອນຊາຍຫລືຍິງທີ່ເປັນຫນຸ່ມເປັນສາວມັກແຕ່ງຕົວອາບນ້ຳສຣະກະມ່ອມ ມີຊາກສົບງູ ຊາກສົບສຸນັກຫລືຊາກສົບມນຸສຍ໌ ມາຕິດຢູ່ທີ່ຄໍ ເກີດຄວາມຮູ້ສຶກອຶດອັດ ເບື່ອຫນ່າຍ ກຽດຊັງ ພິກສຸເຫລົ່ານັ້ນຈຶ່ງຂ້າຕົວຕາຍເອງແດ່ ໃຊ້ກັນແລະກັນໃຫ້ຂ້າແດ່ ພິກສຸບາງກຸ່ມພາກັນໄປຫາຕາເຖນມິຄລັນທິກະບອກວ່າ ‘ຂໍໂອກາສແດ່ເຖີດ ທ່ານຊ່ອຍຂ້າພອກອາຕມາເຖີດ ບາຕຣແລະຈີວອນນີ້ຈັກເປັນຂອງທ່ານ’ ຕາເຖນມິຄລັນທິກະ ຮັບຈ້າງເອົາບາຕຣແລະຈີວອນ ຈຶ່ງຂ້າພິກສຸວັນລະ ໑ ຮູບແດ່ ໒ລ໓ ວັນລະ ໕໐ ຮູບແດ່ ຂໍປະທານພຣະອໂອກາສ ຂໍພຣະອົງຄ໌ໂປຣດຕຣັສບອກວິທີອື່ນທີ່ພິກສຸສົງຂ໌ຈະເພິ່ງດຳຣົງຢູ່ໃນອຣຫັຕຕຜົລເຖີດພຣະພຸທທເຈົ້າຂ້າ” ພຣະຜູ້ມີພຣະພາຄຕຣັສວ່າ “ອານົນທ໌ ຖ້າເຊັ່ນນັ້ນທ່ານຈົ່ງຜດຽງ(ຮຽກປະຊຸມ) ພິກສຸເທົ່າທີ່ອາສັຍກຸງເວສາລີຢູ່ທັງຫມົດໃຫ້ປະຊຸມກັນທີ່ໂຮງອາຫານ” ທ່ານພຣະອານົນທ໌ທູລຮັບສນອງພຣະພຸທທດຳຣັສ ແລ້ວຜດຽງ(ຮຽກປະຊຸມ) ພິກສຸສົງຂ໌ທີ່ອາສັຍກຸງເວສາລີຢູ່ທັງຫມົດໃຫ້ມາປະຊຸມທີ່ໂຮງອາຫານ ແລ້ວເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຄັນເຖິງແລ້ວໄດ້ຂາບທູລພຣະຜູ້ມີພຣະພາຄດັ່ງນີ້ວ່າ “ພຣະພຸທທເຈົ້າຂ້າ ພິກສຸສົງຂ໌ປະຊຸມພ້ອມກັນແລ້ວ ຂໍພຣະອົງຄ໌ຊົງພຣະກຣຸນາໂປຣດຊາບເວລາອັນສົມຄວຣໃນບັດນີ້”

## ຊົງສະແດງອານາປານສຕິສມາທິກຖາ

[໑໕໕] ລຳດັບນັ້ນ ພຣະຜູ້ມີພຣະພາຄສເດັຈໄປທີ່ໂຮງອາຫານ ປະທັບນັ່ງເທິງພຸທທອາສນ໌ທີ່ຈັດຖວາຍ ຕຣັສ ຮຽກພິກສຸທັງຫລາຍມາຮັບສັ່ງວ່າ “ພິກສຸທັງຫລາຍ ອານາປານສຕິສມາທິ ແມ່ນວ່ານີ້ທີ່ຈະເຣີນແລ້ວເຮັດໃຫ້ມາກແລ້ວ ຍ່ອມເປັນສພາພສງົບປານີຕ ສົດຊື່ນ ເປັນທັມເຄື່ອງຢູ່ເປັນສຸຂ ແລະທຳອກຸສົລທັມຊົ່ວຮ້າຍທີ່ເກີດຂຶ້ນແລ້ວ ໆ ໃຫ້ອັນຕຣທານໄປ ສງົບໄປໂດຍໄວ ປຽບເຫມືອນຝຸ່ນລະອອງທີ່ຟຸ້ງຂຶ້ນທ້າຍຣະດູຮ້ອນ ຖືກຝົນໃຫຍ່ນອກຣະດູການໃຫ້ອັນຕຣທານໄປ ສງົບໄປໂດຍໄວ ອານາປານສຕິສມາທິທີ່ຈະເຣີນແລ້ວຢ່າງໃດ ເຮັດໃຫ້ມາກແລ້ວຢ່າງໃດ ຈຶ່ງເປັນສພາພສງົບປານີຕ ສົດຊື່ນ ເປັນທັມເຄື່ອງຢູ່ເປັນສຸຂແລະທຳອກຸສົລທັມຊົ່ວຮ້າຍທີ່ເກີດຂຶ້ນແລ້ວ ໆ ໃຫ້ອັນຕຣທານໄປ ສງົບໄປໂດຍໄວ ພິກສຸທັງຫລາຍ ພິກສຸໃນທັມວິນັຍນີ້ ໄປສູ່ປ່າກໍດີ ໄປສູ່ເຫງົ້າໄມ້ກໍດີ ໄປສູ່ເຮືອນວ່າງກໍດີ ນັ່ງຄູ້ບັລລັງກ໌ຕັ້ງກາຍຕຣົງ ດຳຣົງສຕິໄວ້ສະເພາະຫນ້າ ມີສຕິຫັນໃຈອອກ ມີສຕິຫັນໃຈເຂົ້າ

## ອານາປານສຕິ ໑໖ ຂັ້ນ

(໑) ເມື່ອຫັນໃຈອອກຍາວ ກໍຮູ້ແຈ້ງວ່າຫັນໃຈອອກຍາວ ເມື່ອຫັນໃຈເຂົ້າຍາວ ກໍຮູ້ແຈ້ງວ່າຫັນໃຈເຂົ້າຍາວ

(໒) ເມື່ອຫັນໃຈອອກສັ້ນ ກໍຮູ້ແຈ້ງວ່າຫັນໃຈອອກສັ້ນ ເມື່ອຫັນໃຈເຂົ້າສັ້ນ ກໍຮູ້ແຈ້ງວ່າຫັນໃຈເຂົ້າສັ້ນ

(໓) ສຳນຶກວ່າ ຈະຮູ້ແຈ້ງກອງລົມທັງປວງ ຫັນໃຈອອກ ສຳນຶກວ່າ ຈະຮູ້ແຈ້ງກອງລົມທັງປວງ ຫັນໃຈເຂົ້າ

(໔) ສຳນຶກວ່າ ຈະຣະງັບກາຍສັງຂາຣ ຫັນໃຈອອກ ສຳນຶກວ່າ ຈະຣະງັບກາຍສັງຂາຣ ຫັນໃຈເຂົ້າ

(໕) ສຳນຶກວ່າ ຈະຮູ້ແຈ້ງປີຕິ ຫັນໃຈອອກ ສຳນຶກວ່າ ຈະຮູ້ແຈ້ງປີຕິ ຫັນໃຈເຂົ້າ

(໖) ສຳນຶກວ່າ ຈະຮູ້ແຈ້ງສຸຂ ຫັນໃຈອອກ ສຳນຶກວ່າ ຈະຮູ້ແຈ້ງສຸຂ ຫັນໃຈເຂົ້າ

(໗) ສຳນຶກວ່າ ຈະຮູ້ແຈ້ງຈິຕຕສັງຂາຣ ຫັນໃຈອອກ ສຳນຶກວ່າ ຈະຮູ້ແຈ້ງຈິຕຕສັງຂາຣ ຫັນໃຈເຂົ້າ

(໘) ສຳນຶກວ່າ ຈະຣະງັບຈິຕຕສັງຂາຣ ຫັນໃຈອອກສຳນຶກວ່າ ຈະຣະງັບຈິຕຕສັງຂາຣ ຫັນໃຈເຂົ້າ

(໙) ສຳນຶກວ່າ ຈະຮູ້ແຈ້ງຈິຕ ຫັນໃຈອອກ ສຳນຶກວ່າ ຈະຮູ້ແຈ້ງຈິຕ ຫັນໃຈເຂົ້າ

(໑໐) ສຳນຶກວ່າ ຈະຍັງຈິຕໃຫ້ບັນເທີງ ຫັນໃຈອອກ ສຳນຶກວ່າ ຈະຍັງຈິຕໃຫ້ບັນເທີງ ຫັນໃຈເຂົ້າ

(໑໑) ສຳນຶກວ່າ ຈະຕັ້ງຈິຕຫມັ້ນ ຫັນໃຈອອກ ສຳນຶກວ່າ ຈະຕັ້ງຈິຕຫມັ້ນ ຫັນໃຈເຂົ້າ

(໑໒) ສຳນຶກວ່າ ຈະເປື້ອງຈິຕ ຫັນໃຈອອກ ສຳນຶກວ່າ ຈະເປື້ອງຈິຕ ຫັນໃຈເຂົ້າ

(໑໓) ສຳນຶກວ່າ ຈະພິຈາຣຌາເຫັນວ່າບໍ່ທ່ຽງ ຫັນໃຈອອກ ສຳນຶກວ່າ ຈະພິຈາຣຌາເຫັນວ່າບໍ່ທ່ຽງ ຫັນໃຈເຂົ້າ

(໑໔) ສຳນຶກວ່າ ຈະພິຈາຣຌາເຫັນຄວາມຄາຍອອກໄດ້ ຫັນໃຈອອກ ສຳນຶກວ່າ ຈະພິຈາຣຌາເຫັນຄວາມຄາຍອອກໄດ້ ຫັນໃຈເຂົ້າ

(໑໕) ສຳນຶກວ່າ ຈະພິຈາຣຌາເຫັນຄວາມດັບໄປ ຫັນໃຈອອກ ສຳນຶກວ່າ ຈະພິຈາຣຌາເຫັນຄວາມດັບໄປ ຫັນໃຈເຂົ້າ

(໑໖) ສຳນຶກວ່າ ຈະພິຈາຣຌາເຫັນຄວາມສລັດເສັຽໄດ້ ຫັນໃຈອອກ ສຳນຶກວ່າ ຈະພິຈາຣຌາເຫັນຄວາມສລັດເສັຽໄດ້ ຫັນໃຈເຂົ້າ”

ຊົງປະຊຸມສົງຊ໌ບັນຍັດສິກຂາບົທ

[໑໓໓] ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຊ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ຊາບວ່າ ພິກສຸທັງຫລາຍຂ້າຕົວຕາຍເອງແດ່ ໃຊ້ກັນແລະກັນໃຫ້ຂ້າແດ່ ບາງກຸ່ມພາກັນເຂົ້າໄປຫາຕາເຖນມິຄລັນຫິກະ ບອກວ່າ 'ຂໍໂອກາສແດ່ທ້ອນ ທ່ານຊ່ອຍຂ້າພອກອາຕມາແດ່ເຖີດ ບາຕຣແລະຈີວອນນີ້ຈັກເປັນຂອງທ່ານ' ແມ່ນແທ້ບໍ" ພິກສຸທັງຫລາຍທູລຮັບວ່າ "ແມ່ນແທ້ພຣະພຸທຫເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທຫເຈົ້າຊົງຕຳຫນິວ່າ "ພິກສຸທັງຫລາຍ ກາຣກະທຳຂອງພິກສຸເຫລົ່ານັ້ນ ບໍ່ສົມຄວຣ ບໍ່ຄ້ອຍຕາມ ບໍ່ເຫມາະສົມ ບໍ່ແມ່ນກິຈຂອງສມນະ ໃຊ້ບໍ່ໄດ້ ບໍ່ຄວຣທຳ ຈັ່ງໃດພິກສຸເຫລົ່ານັ້ນ ຈຶ່ງຂ້າຕົວຕາຍ
ເອງແດ່ ໃຊ້ກັນແລະໃຫ້ຂ້າແດ່ ບາງກຸ່ມພາກັນເຂົ້າໄປຫາຕາເຖນມິຄລັນຫິກະ ບອກວ່າ 'ຂໍໂອກາສແດ່ເຖີດ ທ່ານຊ່ອຍຂ້າພອກອາຕມາແດ່ເຖີດ ບາຕຣແລະຈີວອນນີ້ຈັກເປັນຂອງທ່ານ' ແດ່ລະ ພິກສຸທັງຫລາຍ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍ ຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັຕ

[໑໓໗] ກໍ ພິກສຸໃດຈົງໃຈພາກກາຍມນຸສຍ໌ຈາກຊີວິຕ ຫລືແສວງຫາສັສຕຣາ ອັນຈະພາກກາຍມນຸສຍ໌ນັ້ນ ແມ່ນແຕ່ພິກສຸນີ້ກໍເປັນປາຣາຊິກ ຫາສັງວາສບໍ່ໄດ້ ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັຕໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື້ອງຫມູ່ພິກສຸຜູ້ຈະເຣີນອສຸພກັມມັຕຖານກັບຕາເຖນມິຄລັນຫິກະ ຈົບ

ເຣື້ອງພຣະສັພພັຄຄີຍ໌

[໑໓໘] ສມັຍນັ້ນ ອຸບາສິກຄົນນຶ່ງລົ້ມປ່ວຍ ເຂົາມີພັຣຍາຮູບງາມ ຫນ້າເບິ່ງຫນ້າຊົມ ພອກພິກສຸສັພພັຄຄີຍ໌ມັກພັຣຍາຂອງເຂົາຈຶ່ງປຶກສາວ່າ "ຖ້າອຸບາສິກຍັງມີຊີວິຕ ພອກເຮົາຈັກບໍ່ໄດ້ນາງ ມາຊ່ອຍກັນກ່າວພັນນາຄຸນຄວາມຕາຍໃຫ້ເຂົາຟັງເຖີດ" ຈຶ່ງເຂົ້າໄປຫາອຸບາສິກກ່າວວ່າ "ອຸບາສິກ ທ່ານທຳຄຸນງາມຄວາມດີ ທຳທີ່ຕ້ານ ທານຄວາມຂີ້ຢ້ານໄວ້ແລ້ວ ບໍ່ໄດ້ທຳຊົ່ວ ບໍ່ໄດ້ທຳບາບຫຍາບຊ້າ ຫາຣຸນຫຍັງໄວ້ ທ່ານສ້າງແຕ່ຄຸນງາມຄວາມດີ ບໍ່ສ້າງກັມຊົ່ວເລີຍ ຈະມີຊີວິຕຢູ່ຢ່າງລຳບາກຍາກເຂັນ

ໄປເຮັດຫຍັງ ທ່ານຕາຍເສັ່ງດີກວ່າ ຫລັງຈາກຕາຍແລ້ວ
ຈັກໄປບັງເກີດໃນສຸຄຕິ ໂລກສວັນຄ໌ ຈັກເອີບອີ່ມພຮັ່ງພ້ອມດ້ວຍກາມຄຸນ ໕ ອັນເປັນທິພຍ໌"
[໑໕໙] ອຸບາສິກເຫັນຈິງວ່າ "ທ່ານກ່າວແມ່ນແທ້ເພາະເຮົາທຳຄຸນງາມຄວາມດີ ທຳທີ່ຕ້ານທານຄວາມຂີ້ຢ້ານໄວ້ແລ້ວ ບໍ່ໄດ້ທຳຊົ່ວ ບໍ່ໄດ້ທຳບາບຫຍາບຊ້າທາຣຸນຫຍັງໄວ້ ເຮົາສ້າງແຕ່ຄຸນງາມຄວາມດີ ບໍ່ສ້າງກັມຊົ່ວເລີຍ ຈະມີຊີວິຕຢູ່ຢ່າງລຳບາກຍາກເຂັນໄປເຮັດຫຍັງ ເຮົາຕາຍເສັ່ງດີກວ່າ ຫລັງຈາກຕາຍແລ້ວ ຈັກໄປບັງເກີດໃນສຸຄຕິ ໂລກສວັນຄ໌ ຈັກເອີບອີ່ມພຮັ່ງພ້ອມດ້ວຍກາມຄຸນ ໕ ອັນເປັນທິພຍ໌" ຈຶ່ງຮັບປະທານອາຫາຣແສລງ ກິນຂອງແສລງ ຊີມຂອງແສລງ ດື່ມຂອງແສລງ ຈົນອາກາຣເຈັບປ່ວຍຫນັກເຂົ້າເຖິງກັບເສັ່ງຊີວິຕ ພັຣຍາຂອງ
ອຸບາສິກນັ້ນຕຳໜິ ປະນາມ ໂພນທະນາວ່າ "ພຣະສມນະເຊື້ອສາຍສູາກຍບຸຕຣເຫລົ່ານີ້ ບໍ່ມີຄວາມລະອາຍ ທຸສີລ ຊອບກ່າວເທັຈ ແຕ່ຍັງປະຕິຍານຕົນວ່າ ປະພຶດທັມ ປະພຶດສງົບ ປະພຶດພຣົມຈັນຍ໌ ກ່າວວ່າຕົນມີສີລ ມີກັລຍານທັມ ພວກທ່ານບໍ່ມີຄວາມເປັນສມນະ ຄວາມເປັນພຣາມນ໌ ຄວາມເປັນສມນະຄວາມເປັນພຣາມນ໌ຂອງພວກທ່ານເສື່ອມສິ້ນໄປແລ້ວ ພວກທ່ານຈະເປັນສມນະຈະເປັນພຣາມນ໌ໄດ້ຢ່າງໃດ ພວກທ່ານປາສຈາກຄວາມເປັນສມນະ ປາສຈາກຄວາມເປັນພຣາມນ໌ ພວກທ່ານໄດ້ກ່າວພັນນາຄຸນຄວາມຕາຍໃຫ້ສາມີຂອງເຮົາຟັງ ສາມີຂອງເຮົາຖືກພວກທ່ານຂ້າແລ້ວ"
ແມ່ນແຕ່ພວກຊາວບ້ານອື່ນໆ ກໍຕຳໜິ ປະນາມ ໂພນທະນາວ່າ "ພຣະສມນະເຊື້ອສາຍສູາກຍບຸຕຣເຫລົ່ານີ້ບໍ່ມີຄວາມລະອາຍ ຯລຯ ພວກທ່ານກ່າວພັນນາຄຸນຄວາມຕາຍໃຫ້ອຸບາສິກຟັງ ອຸບາ ສິກຖືກພວກທ່ານຂ້າແລ້ວ"
ພິກສຸທັງຫລາຍໄດ້ຍິນປະຊາຊົນ ຕຳໜິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ຯລຯ ຈຶ່ງຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ ຈຶ່ງກ່າວພັນນາຄຸນຄວາມຕາຍໃຫ້ອຸບາສິກຟັງລະ"

ຊົງປະຊຸມສົງຊ໌ບັນຍັຕອນຸບັນຍັຕ

[໑໖໐] ລຳດັບນັ້ນ ພິກສຸທັງຫລາຍຈຶ່ງນຳເຣື້ອງນັ້ນໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຮັບສັ່ງໃຫ້ປະຊຸມສົງຊ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານກ່າວພັນນາຄຸນຄວາມຕາຍໃຫ້ອຸບາສິກຟັງແມ່ນແທ້ບໍ" ພິກສຸເຫລົ່ານັ້ນທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າ ຊົງຕຳໜິວ່າ "ໂມຊບຸຣຸສທັງຫລາຍ ກາຣກະທຳຂອງພວກທ່ານບໍ່

ສົມຄວຣ ບໍ່ຄ້ອຍຕາມ ບໍ່ເຫມາະສົມ ບໍ່ແມ່ນກິຈຂອງສມນະ ໃຊ້ບໍ່ໄດ້ ບໍ່ຄວຣທຳ ຈັ່ງໃດພວກທ່ານຈຶ່ງກ່າວ ພັນນາຄຸນຄວາມຕາຍໃຫ້ອຸບາສົກຟັງລະ ໂມຂບຸຣຸສທັງຫລາຍ ການເຮັດຢ່າງນີ້ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

## ພຣະອນຸບັນຍັຕ

[໑໗໑] ອີກຢ່າງນຶ່ງ ພິກສຸໃດຈົງໃຈພາກກາຍມນຸສຍ໌ຈາກຊີວິຕ ຫລືແສວງຫາສັສຕຣາ ອັນຈະພາກກາຍມນຸສຍ໌ນັ້ນ ກ່າວພັນນາຄຸນຄວາມຕາຍຫລືຊັກຊວນເພື່ອໃຫ້ຕາຍວ່າ "ທ່ານຜູ້ຈະເຣີນ ຈະມີຊີວິຕຢ່າງລຳບາກຍາກເຂັນນີ້ໄປເຮັດຫຍັງ ທ່ານຕາຍເສັຽດີກວ່າດັ່ງນີ້" ທ່ານມີຈິຕໃຈຢ່າງນີ້ ມີດຳຣິໃນໃຈຢ່າງນີ້ ກ່າວພັນນາຄຸນຄວາມຕາຍຫລືຊັກຊວນເພື່ອຄວາມຕາຍໂດຍປະການຕ່າງໆ ແມ່ນພິກສຸນີ້ກໍເປັນປາຣາຊິກ ຫາສັງວາສບໍ່ໄດ້

## ເຣື້ອງພຣະສັພພັຄຄີຍ໌ ຈົບ

## ສິກຂາບົທວິພັງຄ໌

[໑໗໔] ຄຳວ່າ ອີກຢ່າງນຶ່ງ...ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ອີກຢ່າງນຶ່ງ...ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າ ພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ຄຳວ່າ ຈົງໃຈ ໄດ້ແກ່ ຮູ້ຢູ່ ຮູ້ດີຢູ່ ຈົງໃຈ ຕັ້ງໃຈ ລ່ວງລະເມີດ

ທີ່ຊື່ວ່າ ກາຍມນຸສຍ໌ ໄດ້ແກ່ ຈິຕດວງແຣກເກີດ ຄືວິນຍານດວງທຳອິດປາກົດຂຶ້ນໃນຄັນພ໌ມາຣດາ ຈົນເຖິງເວລາຕາຍ ອັຕພາພໃນຣະຫວ່າງນີ້ຊື່ວ່າກາຍມນຸສຍ໌

ຄຳວ່າ ພາກຈາກຊີວິຕ ໄດ້ແກ່ ຕັດທຳລາຍຊີວິຕິນທຣິຍ໌ ຕັດຄວາມສືບຕໍ່

ຄຳວ່າ ແສວງຫາສັສຕຣາອັນຈະພາກກາຍມນຸສຍ໌ນັ້ນ ໄດ້ແກ່ ແສງຫາດາບ ຫອກ ແຫລນ ຫລາວ ຄ້ອນ ຫີນ ມີດ ຍາພິສ ຫລືເຊືອກ

ຄຳວ່າ ກ່າວພັນນາຄຸນຄວາມຕາຍ ໄດ້ແກ່ ສະແດງໂທສໃນຄວາມມີຊີວິຕຢູ່ ພັນນາຄຸນຄວາມຕາຍ

ຄໍາວ່າ ຊັກຊວນເພື່ອໃຫ້ຕາຍ ຄື ຊັກຊວນໃຫ້ນໍາມີດມາ ໃຫ້ກິນຢາພິສູຫລືໃຫ້ເອົາເຊືອກຜູກຄໍຕາຍ

ຄໍາວ່າ ທ່ານຜູ້ຈະເຣີນ ເປັນຄໍາຮ້ອງຮຽກ

ຄໍາວ່າ ຈະມີຊີວິດຢ່າງລໍາບາກຍາກເຂັນນີ້ໄປເຮັດຫຍັງ ທ່ານຕາຍເສັຽດີກວ່າ ນັ້ນມີອະທິບາຍວ່າ ຊີວິດທີ່ຊື່ວ່າຍາກແຄ້ນ ຄື ທຽບຊີວິດຂອງຄົນມັ່ງຄັ່ງ ຊີວິດຂອງຄົນຂັດສົນກໍຊື່ວ່າຍາກແຄ້ນ ທຽບຊີວິດຂອງຄົນມີຊັພຍ໌ ຊີວິດຂອງຄົນບໍ່ມີຊັພຍ໌ກໍຊື່ວ່າຍາກແຄ້ນ ທຽບຊີວິດຂອງພວກເທວດາ ຊີວິດຂອງມນຸສູຍ໌ທັງຫລາຍກໍຊື່ວ່າຍາກແຄ້ນ

ທີ່ຊື່ວ່າ ຊີວິດລໍາບາກ ໄດ້ແກ່ ຊີວິດຄົນມືຂາດ ຕີນຂາດ ທັງມືແລະຕີນຂາດ ຫູແຫວ່ງ ດັງອື່ນ ທັງຫູແຫວ່ງແລະດັງອື່ນ ມີຊີວິດຢູ່ຢ່າງຍາກເຂັນເຊັ່ນນີ້ໄປເຮັດຫຍັງ ຕາຍເສັຽດີກວ່າຢູ່

ຄໍາວ່າ ມີຈິຕໃຈຢ່າງນີ້ ໄດ້ແກ່ ຈິຕຄືໃຈ ໃຈຄືຈິຕ

ຄໍາວ່າ ມີດໍາຣິໃນໃຈຢ່າງນີ້ ຄື ມີຄວາມຫມັ້ນຫມາຍຈະໃຫ້ຕາຍ ມີເຈຕຈໍານົງຈະໃຫ້ຕາຍ ມີຄວາມປະສົງຄ໌ຈະໃຫ້ຕາຍ

ຄໍາວ່າ ໂດຍປະການຕ່າງໆ ຄື ໂດຍອາການສູງຕ່ໍາ

ຄໍາວ່າ ກ່າວພັນນາຄຸນຄວາມຕາຍ ໄດ້ແກ່ ສະແດງໂທສູຂອງຊີວິດ ພັນນາຄຸນຄວາມຕາຍວ່າຫລັງຈາກຕາຍແລ້ວ ທ່ານຈັກໄປບັງເກີດໃນສຸຄຕິໂລກສວັນຄ໌ ຈັກເອີບອິ່ມພັ່ງພ້ອມດ້ວຍກາມຄຸນ ໕ ອັນເປັນທິພຍ໌ໃນທີ່ນັ້ນ

ຄໍາວ່າ ຊັກຊວນເພື່ອຄວາມຕາຍ ຄື ຊັກຊວນໃຫ້ນໍາມີດມາ ໃຫ້ກິນຢາພິສູ ໃຫ້ໃຊ້ເຊືອກຜູກຄໍຕາຍ ໃຫ້ໂດດ ລົງບໍ່ ລົງເຫວ ຫລືທີ່ຜາຊັນ

ຄໍາວ່າ ແມ່ນພິກສຸນີ້ ພຣະຜູ້ມີພຣະພາຄ ຕຣັສທຽບຄຽງກັບພິກສຸ ໔ ຮູບທໍາອິດ

ຄໍາວ່າ ເປັນປາຣາຊິກ ອະທິບາຍວ່າ ພິກສຸຜູ້ຈົງໃຈພາກກາຍມນຸສູຍ໌ເສັຽຈາກຊີວິດ ຍ່ອມບໍ່ເປັນສມນະບໍ່ເປັນເຊື້ອສາຍສູາກຍບຸຕຣ ປຽບເຫມືອນແຜ່ນສີລາຫນາແຕກອອກເປັນ ໒ ປ່ຽງ ຈະປະສານໃຫ້ສນິທເປັນເນື້ອດຽວກັນອີກບໍ່ໄດ້ ດັ່ງນັ້ນພຣະຜູ້ມີພຣະພາຄຈຶ່ງຕຣັສວ່າເປັນປາຣາຊິກ

ຄໍາວ່າ ຫາສັງວາສບໍ່ໄດ້ ອະທິບາຍວ່າ ທີ່ຊື່ວ່າ ສັງວາສ ໄດ້ແກ່ ກັມທີ່ທໍາຮ່ວມກັນ ອຸທເທສທີ່ສວດຮ່ວມກັນ ຄວາມມີສິກຂາສເມີກັນ ນີ້ຊື່ວ່າສັງວາສ ສັງວາສນັ້ນບໍ່ມີກັບພິກສຸຮູບນັ້ນ ດ້ວຍເຫຕຸນັ້ນພຣະຜູ້ມີພຣະພາຄຈຶ່ງຕຣັສວ່າ ຫາສັງວາສບໍ່ໄດ້

## ພຣະວິນັຍປິດົກ ມຫາວິພັງຄ໌ [໑. ປາຣາຊິກກັນຖ໌] ປາຣາຊິກສິກຂາບົທທີ ໓ ບົທພາຊນີຍ໌

## ບົທພາຊນີຍ໌

### ມາຕິກາ

[໑໗໓] ທຳເອງ ຢືນຢູ່ໃກ້ ສັ່ງທູຕ ສັ່ງທູຕຕໍ່ ທູຕບໍ່ສາມາດ ທູຕໄປແລ້ວກັບມາ ທີ່ບໍ່ລັບສຳຄັນວ່າທີ່ລັບ ທີ່ລັບສຳຄັນວ່າທີ່ບໍ່ລັບ ທີ່ບໍ່ລັບສຳຄັນວ່າທີ່ບໍ່ລັບ ທີ່ລັບສຳຄັນວ່າທີ່ລັບ ພັນນາດ້ວຍກາຍ ພັນນາດ້ວຍວາຈາ ພັນນາດ້ວຍກາຍແລະວາຈາ ພັນນາດ້ວຍທູຕ ພັນນາດ້ວຍໜັງສື ຫລຸມພາງ ທີ່ເພິ່ງການລອບວາງ ເພສັຊ ການນຳຮູບເຂົ້າໄປໃກ້ ການນຳສຽງເຂົ້າໄປໃກ້ ການນຳກິ່ນເຂົ້າໄປໃກ້ ການນຳຣົສເຂົ້າໄປໃກ້ ການນຳໂຜຕຖັພພະເຂົ້າໄປໃກ້ ການນຳທັມມາຣົມນ໌ເຂົ້າໄປໃກ້ ການບອກ ການແນະນຳ ການນັດໝາຍ ການທຳນິມິຕ

### ທຳເອງ

[໑໗໔] ຄຳວ່າ ທຳເອງ ຄື ລົງມືຂ້າເອງດ້ວຍກາຍ ດ້ວຍເຄື່ອງປະຫານທີ່ເນື່ອງດ້ວຍກາຍ ຫລືດ້ວຍເຄື່ອງປະຫານທີ່ຕ້ອງຊັດໄປ

### ຢືນຢູ່ໃກ້

ຄຳວ່າ ຢືນຢູ່ໃກ້ ຄື ຍືນສັ່ງຢູ່ທີ່ໃກ້ໆ ວ່າ “ຈົ່ງແທງຢ່າງນີ້ ຈົ່ງປະຫານຢ່າງນີ້ ຈົ່ງຂ້າຢ່າງນີ້”

### ສັ່ງທູຕ

ພິກສຸສັ່ງພິກສຸວ່າ “ທ່ານຈົ່ງຂ້າຜູ້ຊື່ນີ້” ຕ້ອງອາບັຕິທຸກກຕ ພິກສຸຜູ້ຮັບຄຳສັ່ງສຳຄັນຜູ້ນັ້ນວ່າເປັນຜູ້ນັ້ນຈຶ່ງຂ້າຜູ້ນັ້ນຕາຍ ຕ້ອງອາບັຕິປາຣາຊິກທັງ ໒ ຮູບ
ພິກສຸສັ່ງພິກສຸວ່າ “ທ່ານຈົ່ງຂ້າຜູ້ຊື່ນີ້” ຕ້ອງອາບັຕິທຸກກຕ ພິກສຸຜູ້ຮັບຄຳສັ່ງສຳຄັນຜູ້ນັ້ນວ່າເປັນຜູ້ນັ້ນແຕ່ຂ້າຜູ້ອື່ນຕາຍ ພິກສຸຜູ້ສັ່ງບໍ່ຕ້ອງອາບັຕິ ພິກສຸຜູ້ຂ້າຕ້ອງອາບັຕິປາຣາຊິກ
ພິກສຸສັ່ງພິກສຸວ່າ “ທ່ານຈົ່ງຂ້າຜູ້ຊື່ນີ້” ຕ້ອງອາບັຕິທຸກກຕ ພິກສຸຜູ້ຮັບຄຳສັ່ງສຳຄັນຜູ້ນັ້ນວ່າເປັນຜູ້ອື່ນແຕ່ຂ້າຜູ້ນັ້ນ ຕ້ອງອາບັຕິປາຣາຊິກທັງ ໒ ຮູບ
ພິກສຸສັ່ງພິກສຸວ່າ “ທ່ານຈົ່ງຂ້າຜູ້ຊື່ນີ້” ຕ້ອງອາບັຕິທຸກກຕ ພິກສຸຜູ້ຮັບຄຳສັ່ງສຳຄັນຜູ້ນັ້ນວ່າເປັນຜູ້ອື່ນແລະຂ້າຜູ້ອື່ນ ພິກສຸຜູ້ສັ່ງບໍ່ຕ້ອງອາບັຕິ ພິກສຸຜູ້ຂ້າຕ້ອງອາບັຕິປາຣາຊິກ

ພິກສຸ (ຜູ້ເປັນອາຈາຣຍ໌) ສັ່ງພິກສຸ (ຊື່ວ່າພຸທທຣັກຂິຕ) ວ່າ “ທ່ານຈົ່ງບອກພິກສຸຊື່ (ທັມມຣັກຂິຕ) ນີ້ວ່າ ຈົ່ງ ບອກພິກສຸຊື່ (ສັງຂຣັກຂິຕ) ນີ້ວ່າ ພິກສຸຊື່ນີ້ຈົ່ງຂ້າບຸຄຄົລນີ້” ດັ່ງນີ້ຕ້ອງອາບັຕິທຸກກົຕ ພິກສຸຜູ້ຮັບຄຳສັ່ງໄປບອກພິກສຸອີກຮູບນຶ່ງ ຕ້ອງອາບັຕິທຸກກົຕ ພິກສຸຜູ້ຂ້າ ຮັບຄຳສັ່ງ ພິກສຸຜູ້ສັ່ງຄັ້ງ ທຳອິດ ຕ້ອງອາບັຕິຖຸລລັຈຈັຍ ພິກສຸຜູ້ຂ້າຂ້າບຸຄຄົລນັ້ນສຳເຣັຈ ຕ້ອງອາບັຕິປາຣາຊິກທຸກຮູບ ພິກສຸ(ຜູ້ເປັນອາຈາຣຍ໌)ສັ່ງພິກສຸ(ຊື່ພຸທທຣັກຂິຕ)ວ່າ “ທ່ານຈົ່ງບອກພິກສຸຊື່(ທັມມຣັກຂິຕ)ນີ້ວ່າ ຈົ່ງບອກພິກສຸຊື່(ສັງຂຣັກຂິຕ)ນີ້ວ່າ ‘ຈົ່ງຂ້າບຸຄຄົລນີ້” ດັ່ງນີ້ ຕ້ອງອາບັຕິທຸກກົຕ ພິກສຸຜູ້ຮັບຄຳສັ່ງໄປ ບອກພິກສຸຮູບອື່ນ ຕ້ອງອາບັຕິທຸກກົຕ ຜູ້ຂ້າຮັບຄຳສັ່ງ ຕ້ອງອາບັຕິທຸກກົຕ ພິກສຸຜູ້ຂ້າຂ້າບຸຄຄົລນັ້ນ ສຳເຣັຈ ພິກສຸຜູ້ສັ່ງຄັ້ງທຳອິດບໍ່ຕ້ອງອາບັຕິ ພິກສຸຜູ້ສັ່ງຕໍ່ແລະພິກສຸຜູ້ຂ້າ ຕ້ອງອາບັຕິປາຣາຊິກ

## ທູຕບໍ່ສາມາດ

ພິກສຸສັ່ງພິກສຸວ່າ “ຈົ່ງຂ້າບຸຄຄົລຊື່ນີ້” ຕ້ອງອາບັຕິທຸກກົຕ ພິກສຸຜູ້ຮັບຄຳສັ່ງໄປແລ້ວ ກັບມາບອກວ່າ “ຜູ້ຂ້າບໍ່ສາມາດຂ້າຜູ້ນັ້ນໄດ້” ຜູ້ສັ່ງຈຶ່ງສັ່ງອີກວ່າ “ຈົ່ງຂ້າຜູ້ນັ້ນໃນເວລາທີ່ທ່ານສາມາດຈະຂ້າໄດ້” ຕ້ອງອາບັຕິທຸກກົຕ ພິກສຸຜູ້ຮັບຄຳສັ່ງຂ້າບຸຄຄົລນັ້ນສຳເຣັຈ ຕ້ອງອາບັຕິປາຣາຊິກທັງ ໔ ຮູບ

## ທູຕໄປແລ້ວກັບມາ

ພິກສຸສັ່ງພິກສຸວ່າ “ຈົ່ງຂ້າບຸຄຄົລຊື່ນີ້” ຕ້ອງອາບັຕິທຸກກົຕ ທ່ານສັ່ງແລ້ວເກີດຄວາມເດືອດຮ້ອນໃຈ ແຕ່ບໍ່ໄດ້ ກ່າວໃຫ້ຜູ້ຮັບຄຳສັ່ງໄດ້ຍິນວ່າ “ຢ່າຂ້າ” ພິກສຸຜູ້ຮັບຄຳສັ່ງຂ້າບຸຄຄົລນັ້ນສຳເຣັຈ ຕ້ອງ ອາບັຕິປາຣາຊິກທັງ ໔ ຮູບ

ພິກສຸສັ່ງພິກສຸວ່າ “ຈົ່ງຂ້າບຸຄຄົລຊື່ນີ້” ຕ້ອງອາບັຕິທຸກກົຕ ທ່ານສັ່ງແລ້ວເກີດຄວາມເດືອດຮ້ອນໃຈ ຈຶ່ງກ່າວໃຫ້ຜູ້ຮັບຄຳສັ່ງໄດ້ຍິນວ່າ “ຢ່າຂ້າ” ແຕ່ພິກສຸຜູ້ຮັບຄຳສັ່ງກ່າວວ່າ “ທ່ານສັ່ງຂະນ້ອຍແລ້ວ” ຂ້າບຸຄຄົລນັ້ນ ພິກສຸຜູ້ສັ່ງບໍ່ຕ້ອງອາບັຕິ ພິກສຸຜູ້ຂ້າ ຕ້ອງອາບັຕິປາຣາຊິກ

ພິກສຸສັ່ງພິກສຸວ່າ “ຈົ່ງຂ້າບຸຄຄົລຊື່ນີ້” ຕ້ອງອາບັຕິທຸກກົຕ ທ່ານສັ່ງແລ້ວເກີດຄວາມເດືອດຮ້ອນໃຈ ຈຶ່ງກ່າວໃຫ້ຜູ້ຮັບຄຳສັ່ງໄດ້ຍິນວ່າ “ຢ່າຂ້າ” ພິກສຸຜູ້ຮັບຄຳສັ່ງນັ້ນຮັບວ່າ “ດີລະ” ຈຶ່ງງົດເວັ້ນ ບໍ່ຕ້ອງ ອາບັຕິທັງ ໔ ຮູບ

## ທີ່ບໍ່ລັບ ສຳຄັນວ່າທີ່ລັບ

[໑໗໕] ທີ່ບໍ່ລັບ ພິກສຸສຳຄັນວ່າທີ່ລັບ ກ່າວຂຶ້ນວ່າ "ເຮັດຢ່າງໃດ ບຸຄຄົລຊື່ນີ້ຈະຖືກຂ້າ" ຕ້ອງອາບັຕິທຸກກົຕ

ທີ່ລັບ ສຳຄັນວ່າທີ່ບໍ່ລັບ

ທີ່ລັບ ພິກສຸສຳຄັນວ່າທີ່ບໍ່ລັບ ກ່າວຂຶ້ນວ່າ "ເຮັດຢ່າງໃດ ບຸຄຄົລຊື່ນີ້ຈະຖືກຂ້າ" ຕ້ອງອາບັຕິທຸກກົຕ

ທີ່ບໍ່ລັບ ສຳຄັນວ່າທີ່ບໍ່ລັບ

ທີ່ບໍ່ລັບ ພິກສຸສຳຄັນວ່າທີ່ບໍ່ລັບ ກ່າວຂຶ້ນວ່າ "ເຮັດຢ່າງໃດ ບຸຄຄົລຊື່ນີ້ຈະຖືກຂ້າ" ຕ້ອງອາບັຕິທຸກກົຕ

ທີ່ລັບ ສຳຄັນວ່າທີ່ລັບ

ທີ່ລັບ ພິກສຸສຳຄັນວ່າທີ່ລັບ ກ່າວຂຶ້ນວ່າ "ເຮັດຢ່າງໃດ ບຸຄຄົລຊື່ນີ້ຈະຖືກຂ້າ" ຕ້ອງອາບັຕິທຸກກົຕ

ພັນນາດ້ວຍກາຍ

ທີ່ຊື່ວ່າ ພັນນາດ້ວຍກາຍ ໄດ້ແກ່ ພິກສຸສະແດງອາການຕ່າງໆ ດ້ວຍກາຍເປັນເຫຕຸໃຫ້ຮູ້ວ່າ "ຜູ້ໃດຕາຍຢ່າງນີ້ ຜູ້ນັ້ນຈະໄດ້ຊັພຍ໌ ໄດ້ຍົສຫລືໄດ້ໄປສວັນຄ໌" ຕ້ອງອາບັຕິທຸກກົຕ ມີຜູ້ໃດຜູ້ນຶ່ງຄິດຈະຕາຍແລ້ວເຮັດໃຫ້ເກີດທຸກຂເວທນາຕາມການພັນນານັ້ນ ຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍ ຕ້ອງອາບັຕິປາຣາຊິກ

ພັນນາດ້ວຍວາຈາ

ທີ່ຊື່ວ່າ ພັນນາດ້ວຍວາຈາ ໄດ້ແກ່ ພິກສຸກ່າວດ້ວຍວາຈາວ່າ "ຜູ້ໃດຕາຍຢ່າງນີ້ ຜູ້ນັ້ນຈະໄດ້ຊັພຍ໌ ໄດ້ຍົສ ຫລືໄດ້ໄປສວັນຄ໌" ຕ້ອງອາບັຕິທຸກກົຕ ມີຜູ້ໃດຜູ້ນຶ່ງຄິດຈະຕາຍ ແລ້ວເຮັດໃຫ້ເກີດທຸກຂເວທນາຕາມການພັນນານັ້ນ ຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍ ຕ້ອງອາບັຕິປາຣາຊິກ

ພັນນາດ້ວຍກາຍແລະວາຈາ

ທີ່ຊື່ວ່າ ພັນນາດ້ວຍກາຍແລະວາຈາ ໄດ້ແກ່ ພິກສຸສະແດງອາການຕ່າງໆ ດ້ວຍກາຍແລະກ່າວດ້ວຍ ວາຈາວ່າ "ຜູ້ໃດຕາຍຢ່າງນີ້ ຜູ້ນັ້ນຈະໄດ້ຊັພຍ໌ ໄດ້ຍຣສູ ຫລືໄດ້ໄປສວັນຄ໌" ຕ້ອງອາບັຕິທຸກກຕ ມີຜູ້ໃດຜູ້ນຶ່ງຄິດຈະຕາຍຫລືເຮັດໃຫ້ເກີດທຸກຂເວທນາຕາມການພັນນານັ້ນ ຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍ ຕ້ອງອາບັຕິປາຣາຊິກ

## ພັນນາດ້ວຍທູຕ

ທີ່ຊື່ວ່າ ພັນນາດ້ວຍທູຕ ໄດ້ແກ່ ພິກສຸສັ່ງທູຕວ່າ "ຜູ້ໃດຕາຍຢ່າງນີ້ ຜູ້ນັ້ນຈະໄດ້ຊັພຍ໌ ໄດ້ຍົສູ ຫລືໄດ້ໄປ ສວັນຄ໌" ຕ້ອງອາບັຕິທຸກກຕ ມີຜູ້ໃດຜູ້ນຶ່ງຟັງສາສ໌ນຂອງທູຕແລ້ວ
ຄິດຈະຕາຍ ເຮັດໃຫ້ເກີດທຸກຂເວທນາຕາມການພັນນານັ້ນ ຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍຕ້ອງອາບັຕິປາຣາຊິກ

## ພັນນາດ້ວຍໜັງສື

[໑໗໕] ທີ່ຊື່ວ່າ ພັນນາດ້ວຍໜັງສື ໄດ້ແກ່ ພິກສຸຂຽນໜັງສືວ່າ "ຜູ້ໃດຕາຍຢ່າງນີ້ ຜູ້ນັ້ນຈະໄດ້ ຊັພຍ໌ ໄດ້ ຍົສູ ຫລືໄດ້ໄປສວັນຄ໌" ຕ້ອງອາບັຕິທຸກກຕ ທຸກຕົວອັກສຣຜູ້ໃດຜູ້ນຶ່ງເຫັນໜັງສືຄິດ ຈະຕາຍແລ້ວເຮັດໃຫ້ເກີດທຸກຂເວທນາ ຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍ ຕ້ອງອາບັຕິປາຣາຊິກ

## ຫລຸມພາງ

ທີ່ຊື່ວ່າ ຫລຸມພາງ ໄດ້ແກ່ ພິກສຸຂຸດຫລຸມພາງໄວ້ເຈາະຈົງມນຸສຍ໌ວ່າ "ບຸຄຄົລຊື່ນີ້ ຈະຕົກລົງໄປ ຕາຍ" ຕ້ອງອາບັຕິທຸກກຕ ເມື່ອບຸຄຄົລຊື່ນັ້ນຕົກລົງໄປໄດ້ຮັບທຸກຂເວທນາ ຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍ ຕ້ອງອາບັຕິປາຣາຊິກ
ພິກສຸຂຸດຫລຸມພາງໄວ້ບໍ່ເຈາະຈົງດ້ວຍຄິດວ່າ "ໃຜກໍໄດ້ຈະຕົກລົງໄປຕາຍ" ຕ້ອງອາບັຕິທຸກກຕ ມນຸສຍ໌ຕົກລົງໄປໃນຫລຸມນັ້ນ ພິກສຸຜູ້ຂຸດຕ້ອງອາບັຕິທຸກກຕ ເມື່ອມນຸສຍ໌ຕົກລົງ ໄປແລ້ວໄດ້ຮັບ ທຸກຂເວທນາ ຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍ ຕ້ອງອາບັຕິປາຣາຊິກ

ຍັກສ໌ ເຜດ ຫລືສັຕວ໌ເດັຽຣະສານມີກາຍເປັນມນຸສຍ໌ ຕົກລົງໄປໃນຫລຸມນັ້ນ ຕ້ອງອາບັຕິທຸກກຕ ເມື່ອຕົກລົງໄປແລ້ວໄດ້ຮັບທຸກຂເວທນາ ຕ້ອງອາບັຕິທຸກກຕ ຍັກສ໌ເປັນຕົ້ນນັ້ນຕາຍ ຕ້ອງອາບັຕິ

ຖຸລລັຈຈັຍ ສັຕວ໌ເດັຽຣະສານ ຕົກລົງໄປໃນຫລຸມນັ້ນ ຕ້ອງອາບັຕິທຸກກຕ ເມື່ອຕົກລົງໄປແລ້ວໄດ້ຮັບທຸກຂເວທນາ ຕ້ອງອາບັຕິທຸກກຕ ສັຕວ໌ເດັຽຣະສານຕາຍ ຕ້ອງອາບັຕິປາຈິຕຕິຍ໌

## ຫົ່ເພິ່ງ

[໑໗໗] ທີ່ຊື່ວ່າ ຫົ່ເພິ່ງ ໄດ້ແກ່ ພິກສຸວາງສູ້ສຕຣາໄວ້ໃນຫົ່ເພິ່ງ ຫລືທາຢາພິສ ເຮັດໃຫ້ເປ່ເພ ຫລືວາງໄວ້ທີ່ແຄມສ້າງ ເຫວຫລືທີ່ລາດຊັນດ້ວຍຫມາຍໃຈວ່າ ຈະມີຜູ້ຕົກລົງໄປຕາຍດ້ວຍວິທີນີ້ ຕ້ອງອາບັຕິທຸກກຕ ມີຜູ້ໄດ້ຮັບທຸກຂເວທນາ ເພາະຕ້ອງສູ້ສຕຣາ ຖືກຢາພິສຫລືຕົກລົງໄປ ຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍ ຕ້ອງອາບັຕິປາຣາຊິກ

## ການລອບວາງ

ທີ່ຊື່ວ່າ ການລອບວາງ ໄດ້ແກ່ ພິກສຸວາງດາບ ຫອກ ສມອກ ຫລາວ ໄມ້ຄ້ອນ ຫິນ ມີດ ຢາພິສ ຫລືເຊືອກໄວ້ໃກ້ໆ ດ້ວຍຕັ້ງໃຈວ່າ ຈະມີຜູ້ຕາຍດ້ວຍຂອງສິ່ງນີ້ ຕ້ອງອາບັຕິທຸກກຕ ມີຜູ້ຄິດວ່າ ເຮົາຈະຕາຍ ແລ້ວຍັງທຸກຂເວທນາໃຫ້ເກີດດ້ວຍສິ່ງຂອງນັ້ນ ຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍຕ້ອງອາບັຕິປາຣາຊິກ

## ເພສັຊ

ທີ່ຊື່ວ່າ ເພສັຊ ໄດ້ແກ່ ພິກສຸໃຫ້ເນີຍໃສ ເນີຍຂຸ້ນ ນ້ຳມັນ ນ້ຳເຜິ້ງ ຫລືນ້ຳອ້ອຍ ດ້ວຍຕັ້ງໃຈວ່າ ເຂົາກິນເພສັຊນີ້ແລ້ວຈະຕາຍ ຕ້ອງອາບັຕິທຸກກຕ ເມື່ອເຂົາກິນເພສັຊນັ້ນແລ້ວໄດ້ຮັບທຸກຂເວທນາ ຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍ ຕ້ອງອາບັຕິປາຣາຊິກ

## ການນຳຮູບເຂົ້າໄປໃກ້

[໑໗໘] ທີ່ຊື່ວ່າ ນຳຮູບເຂົ້າໄປໃກ້ ໄດ້ແກ່ ພິກສຸນຳຮູບທີ່ບໍ່ຫນ້າພໍໃຈ ຫນ້າຢ້ານ ຫນ້າຫວາດສຽວເຂົ້າໄປໃກ້ດ້ວຍຕັ້ງໃຈວ່າ ເຂົາເຫັນຮູບນີ້ແລ້ວຈະຕົກໃຈຕາຍ ຕ້ອງອາບັຕິທຸກກຕ ເຂົາເຫັນຮູບນັ້ນແລ້ວຕົກໃຈ ຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍ ຕ້ອງອາບັຕິປາຣາຊິກ

ພິກສຸນຳຮູບທີ່ຫນ້າພໍໃຈ ຫນ້າຮັກ ຫນ້າຈັບໃຈເຂົ້າໄປໃກ້ດ້ອຍຕັ້ງໃຈວ່າ ເຂົາເຫັນຮູບນີ້ແລ້ວຈະ ຈ່ອຍຜອມຕາຍໄປ ເພາະບໍ່ໄດ້(ຮູບນັ້ນ) ຕ້ອງອາບັຕິທຸກກຕ ເຂົາເຫັນຮູບນັ້ນແລ້ວຈ່ອຍຜອມ ເພາະບໍ່ໄດ້(ຮູບນັ້ນ) ຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍ ຕ້ອງອາບັຕິປາຣາຊິກ

## ການນຳສຽງເຂົ້າໄປໃກ້

ທີ່ຊື່ວ່າ ນຳສຽງເຂົ້າໄປໃກ້ ໄດ້ແກ່ ພິກສຸນຳສຽງທີ່ບໍ່ຫນ້າພໍໃຈ ຫນ້າຢ້ານ ຫນ້າຫວາດສຽວເຂົ້າ ໄປໃກ້ ດ້ອຍຕັ້ງໃຈວ່າ ເຂົາຟັງສຽງນີ້ແລ້ວຈະຕົກໃຈຕາຍ ຕ້ອງອາບັຕິທຸກກຕ ເຂົາໄດ້ຍິນສຽງນັ້ນ ແລ້ວຕົກໃຈ ຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍ ຕ້ອງອາບັຕິປາຣາຊິກ

ພິກສຸນຳສຽງທີ່ຫນ້າພໍໃຈ ມ່ວນຈັບໃຈ ເຂົ້າໄປໃກ້ດ້ອຍຕັ້ງໃຈວ່າ ເຂົາຟັງສຽງນີ້ແລ້ວຈະຈ່ອຍ ຜອມຕາຍໄປ ເພາະບໍ່ໄດ້(ສຽງນັ້ນ) ຕ້ອງອາບັຕິທຸກກຕ ເຂົາເຫັນຮູບນັ້ນແລ້ວຈ່ອຍຜອມເພາະບໍ່ໄດ້ (ສຽງນັ້ນ) ຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍ ຕ້ອງອາບັຕິປາຣາຊິກ

## ການນຳກິ່ນເຂົ້າໄປໃກ້

ທີ່ຊື່ວ່າ ນຳກິ່ນເຂົ້າໄປໃກ້ ໄດ້ແກ່ ພິກສຸນຳກິ່ນທີ່ບໍ່ຫນ້າຊອບໃຈ ຫນ້າກຽດຊັງ ຫນ້າປັ່ນທ້ອງ ເຂົ້າໄປໃກ້ດ້ອຍຕັ້ງໃຈວ່າ ເຂົາສູດກິ່ນນີ້ແລ້ວຈະຕາຍໄປ ເພາະກຽດຊັງ ເພາະປັ່ນທ້ອງ ຕ້ອງອາບັຕິ ທຸກກຕ ເຂົາສູດກິ່ນແລ້ວເກີດທຸກຂເວທນາເພາະກຽດຊັງ ເພາະປັ່ນທ້ອງ ຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍ ຕ້ອງອາບັຕິປາຣາຊິກ

ພິກສຸນຳກິ່ນທີ່ຫນ້າພໍໃຈ ເຂົ້າໄປໃກ້ ດ້ອຍຕັ້ງໃຈວ່າ ເຂົາສູດກິ່ນນີ້ແລ້ວ ຈະຈ່ອຍຜອມຕາຍໄປ ເພາະບໍ່ໄດ້(ກິ່ນນັ້ນ) ຕ້ອງອາບັຕິທຸກກຕ ເຂົາເຫັນຮູບນັ້ນແລ້ວຈ່ອຍຜອມເພາະບໍ່ໄດ້(ກິ່ນນັ້ນ) ຕ້ອງ ອາບັຕິຖຸລລັຈຈັຍ ເຂົາຕາຍ ຕ້ອງອາບັຕິປາຣາຊິກ

## ການນຳຣົສເຂົ້າໄປໃກ້

ທີ່ຊື່ວ່າ ການນຳຣົສເຂົ້າໄປໃກ້ ໄດ້ແກ່ ພິກສຸນຳຣົສທີ່ບໍ່ຫນ້າຊອບໃຈ ຫນ້າກຽດຊັງ ຫນ້າສະອິດ ສະອຽນ ເຂົ້າໄປໃກ້ ດ້ອຍຕັ້ງໃຈວ່າ ເຂົາລີ້ມຣົສນີ້ແລ້ວຈະຕາຍ ເພາະກຽດຊັງ ເພາະສະອິດສະອຽນ ຕ້ອງອາບັຕິທຸກກຕ ເມື່ອເຂົາໄດ້ລີ້ມຣົສນັ້ນແລ້ວ ຍັງທຸກຂເວທນາໃຫ້ເກີດເພາະກຽດຊັງ ເພາະສະ ອິດສະອຽນ ຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍ ຕ້ອງອາບັຕິປາຣາຊິກ

ພິກສຸນຳອິສທີ່ຫນ້າຊອບໃຈເຂົ້າໄປໃກ້ ດ້ວຍຕັ້ງໃຈວ່າ ເຂົາລົ້ມອິສນີ້ແລ້ວຈະຈ່ອຍຜອມຕາຍ ເພາະບໍ່ໄດ້(ອິສນັ້ນ) ຕ້ອງອາບັຕິທຸກກົຕ ເຂົາເຫັນຮູບນັ້ນແລ້ວຈ່ອຍຜອມເພາະບໍ່ໄດ້(ອິສນັ້ນ) ຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍ ຕ້ອງອາບັຕິປາຣາຊິກ

## ການນຳໂຜດຖັພພະເຂົ້າໄປໃກ້

ທີ່ຊື່ວ່າ ການນຳໂຜດຖັພພະເຂົ້າໄປໃກ້ ໄດ້ແກ່ ພິກສຸນຳໂຜດຖັພພະທີ່ບໍ່ຫນ້າພໍໃຈ ມີສັມຜັສບໍ່ສະບາຍແລະແຂງ ກະດ້າງເຂົ້າໄປໃກ້ ດ້ວຍຕັ້ງໃຈວ່າ ເຂົາຖືກຕ້ອງສິ່ງນີ້ແລ້ວຈະຕາຍ ຕ້ອງອາບັຕິທຸກກົຕ ເມື່ອເຂົາຖືກຕ້ອງສິ່ງນັ້ນແລ້ວເກີດທຸກຂເວທນາ ຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍ ຕ້ອງອາບັຕິປາຣາຊິກ

ພິກສຸນຳໂຜດຖັພພະທີ່ຫນ້າພໍໃຈ ມີສັມຜັສສະບາຍ ອ່ອນນຸ່ມ ເຂົ້າໄປໃກ້ ດ້ວຍຕັ້ງໃຈວ່າ ເຂົາຖືກຕ້ອງສິ່ງນີ້ແລ້ວ ຈະຈ່ອຍຜອມຕາຍເພາະບໍ່ໄດ້(ໂຜດຖັພພະນັ້ນ) ຕ້ອງອາບັຕິທຸກກົຕ ເຂົາຖືກສິ່ງນັ້ນແລ້ວ ຈ່ອຍຜອມເພາະບໍ່ໄດ້(ໂຜດຖັພພະນັ້ນ) ຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍ ຕ້ອງອາບັຕິປາຣາຊິກ

## ການນຳທັມມາຣົມນ໌ເຂົ້າໄປໃກ້

ທີ່ຊື່ວ່າ ການນຳທັມມາຣົມນ໌ເຂົ້າໄປໃກ້ ໄດ້ແກ່ ພິກສຸສະແດງເຣື່ອງນຣົກແກ່ຄົນຜູ້ຄວຣຈະເກີດໃນນຣົກດ້ວຍຕັ້ງໃຈວ່າ ເຂົາຟັງເຣື່ອງນຣົກນີ້ແລ້ວ ຈະຕົກໃຈຕາຍ ຕ້ອງອາບັຕິທຸກກົຕ ເຂົາຟັງເຣື່ອງນັ້ນແລ້ວ ຕົກໃຈ ຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍ ຕ້ອງອາບັຕິປາຣາຊິກ

ພິກສຸສະແດງເຣື່ອງສວັນຄ໌ແກ່ບຸຄຄົລຜູ້ກະທຳຄວາມດີ ດ້ວຍຕັ້ງໃຈວ່າ ເຂົາຟັງເຣື່ອງນີ້ແລ້ວ ຈະສມັຄຣໃຈຕາຍ ຕ້ອງອາບັຕິທຸກກົຕ ເຂົາຟັງເຣື່ອງນັ້ນແລ້ວ ຄິດວ່າ ເຮົາຈະຍອມຕາຍລະ ແລ້ວທຳທຸກຂເວທນາໃຫ້ເກີດຂຶ້ນ ຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍ ຕ້ອງອາບັຕິປາຣາຊິກ

## ການບອກ

[໑໗໙] ທີ່ຊື່ວ່າ ການບອກ ໄດ້ແກ່ ພິກສຸຖືກຖາມແລ້ວບອກວ່າ “ທ່ານຈົ່ງຕາຍຢ່າງນີ້ ຜູ້ຕາຍຢ່າງນີ້ຈະໄດ້ຊັພຍ໌ ໄດ້ຍົສ ຫລືໄດ້ໄປສວັນຄ໌” ຕ້ອງອາບັຕິທຸກກົຕ ເຂົາຄິດວ່າ ຈະຕາຍ ແລ້ວຍັງທຸກຂເວທນາໃຫ້ເກີດຕາມການບອກນັ້ນ ຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍ ຕ້ອງອາບັຕິປາຣາຊິກ

ການແນະນຳ

ທີ່ຊື່ວ່າ ການແນະນຳ ໄດ້ແກ່ ພິກສຸທີ່ເຂົາບໍ່ໄດ້ຖາມແຕ່ແນະນຳໃຫ້ເຂົາຕາຍວ່າ "ທ່ານຈົ່ງຕາຍຢ່າງນີ້ ຜູ້ຕາຍຢ່າງນີ້ຈະໄດ້ຊັພຍ໌ ໄດ້ຍົສ ຫລືໄດ້ໄປສວັນຄ໌" ຕ້ອງອາບັຕິທຸກກົຕ ເຂົາຄິດວ່າ "ຈະຕາຍ" ແລ້ວຍັງທຸກຂເວທນາໃຫ້ເກີດຕາມການແນະນຳນັ້ນ ຕ້ອງອາບັຕິຖຸລລັຈຈັຍ ເຂົາຕາຍ ຕ້ອງອາບັຕິ ປາຣາຊິກ

ການນັດຫມາຍ

ທີ່ຊື່ວ່າ ການນັດຫມາຍ ໄດ້ແກ່ ພິກສຸທຳການນັດຫມາຍວ່າ "ຈົ່ງຂ້າເຂົາ ຕາມເວລານັດຫມາຍນັ້ນ ຄື ໃນເວລາກ່ອນອາຫານ ຫລືໃນເວລາຫລັງອາຫານ ໃນເວລາກາງຄືນ ຫລືໃນເວລາກາງເວັນ" ຕ້ອງອາບັຕິທຸກກົຕ ຜູ້ຮັບຄຳສັ່ງຂ້າເຂົາສຳເຣັຈຕາມເວລານັດຫມາຍນັ້ນ ຕ້ອງອາບັຕິປາຣາຊິກທັງ ໒ ຮູບ ຂ້າເຂົາໄດ້ກ່ອນຫລືຫລັງເວລານັດຫມາຍນັ້ນ ຜູ້ນັດຫມາຍບໍ່ຕ້ອງອາບັຕິ ຜູ້ຂ້າຕ້ອງອາບັຕິ ປາຣາຊິກ

ການທຳນິມິຕ

ທີ່ຊື່ວ່າ ການທຳນິມິຕ ໄດ້ແກ່ ພິກສຸທຳນິມິຕວ່າ "ເຮົາຈັກຂຍິບຕາ ຍັກຄິ້ວ ຫລືງຶກສີສະ ທ່ານຈົ່ງ ຂ້າເຂົາຕາມທີ່ເຮົາທຳນິມິຕນັ້ນ" ຕ້ອງອາບັຕິທຸກກົຕ ຜູ້ຮັບສັຍຍານະ ຂ້າເຂົາສຳເຣັຈຕາມນິມິຕນັ້ນ ຕ້ອງອາບັຕິປາຣາຊິກທັງ ໒ ຮູບ ຂ້າເຂົາໄດ້ກ່ອນຫລືຫລັງການທຳນິມິຕ ຜູ້ທຳນິມິຕບໍ່ຕ້ອງອາບັຕິ ຜູ້ຂ້າຕ້ອງອາບັຕິປາຣາຊິກ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
໑. ພິກສຸບໍ່ຈົງໃຈ
໒. ພິກສຸບໍ່ຮູ້
໓. ພິກສຸບໍ່ມີຄວາມປະສົງຄ໌ຈະຂ້າ
໔. ພິກສຸວິກົລຈິຕ
໕. ພິກສຸມີຈິຕປັ່ນປ່ວງ

ຝ. ພິກສຸກະວິນກະອາຍເພາະເວທນາ

ຖ. ພິກສຸຕົ້ນບັນຢັຕ

ປຖມພານວາຣ ໃນມນຸສສວິຄຄຫປາຣາຊິກ ຈົບ

## ພຣະວິນັຍປິດົກ ມຫາວິພັງຄ໌ [໑. ປາຣາຊິກກັນຫ໌] ປາຣາຊິກສິກຂາບົທທີ ໓ ຄາຖາຮວມວິນີຕ ວັຕຖຸ

### ຄາຖາຮວມວິນີຕວັຕຖຸ

### ເຣື້ອງທີ່ຊົງວິນິຈສັຍແລ້ວ

ເຣື້ອງພັນນາຄຸນຄວາມຕາຍ ໑ ເຣື້ອງ ▫ເຣື້ອງນັ່ງ ໑ ເຣື້ອງ ▫ເຣື້ອງສາກ ໑ ເຣື້ອງ ▫ເຣື້ອງໄມ້ສຳລັບທຳຄົກ ໑ ເຣື້ອງ ▫ເຣື້ອງພຣະຂຣົວຕາ ໓ ເຣື້ອງ ▫ເຣື້ອງຊີ້ນຕິດຄໍ ໓ ເຣື້ອງ ▫ເຣື້ອງຢາພິສ ໔ ເຣື້ອງ ▫ເຣື້ອງຕຽມພື້ນທີ່ສ້າງວິຫາຣ ໓ ເຣື້ອງ ▫ເຣື້ອງອິດ ໓ ເຣື້ອງ ▫ເຣື້ອງມີດ ໓ ເຣື້ອງ ▫ເຣື້ອງໄມ້ກອນ ໓ ເຣື້ອງ ▫ເຣື້ອງນັ່ງຮ້ານ ໓ ເຣື້ອງ ▫ເຣື້ອງໃຫ້ລົງຈາກຫລັງຄາ ໓ ເຣື້ອງ ▫ເຣື້ອງໂຕນຫນ້າຜາ ໔ ເຣື້ອງ ▫ເຣື້ອງອບຕົວ ໓ ເຣື້ອງ ▫ເຣື້ອງນັຕຖຸ໌ຢາ ໓ ເຣື້ອງ ▫ເຣື້ອງນວດ ໓ ເຣື້ອງ ▫ເຣື້ອງໃຫ້ອາບນ້ຳ ໓ ເຣື້ອງ ▫ເຣື້ອງໃຫ້ທານ້ຳມັນ ໓ ເຣື້ອງ ▫ເຣື້ອງໃຫ້ລຸກຂຶ້ນ ໓ ເຣື້ອງ ▫ເຣື້ອງເຮັດໃຫ້ລົ້ມ ໓ ເຣື້ອງ ▫ເຣື້ອງໃຫ້ຕາຍດ້ວຍເຂົ້າ ໓ ເຣື້ອງ ▫ເຣື້ອງໃຫ້ຕາຍດ້ວຍນ້ຳສົ້ມ ໓ ເຣື້ອງ ▫ເຣື້ອງຍິງມີຄົນພົກັບຊາຍຊູ້ ໑ ເຣື້ອງ ▫ເຣື້ອງຍິງຮ່ວມສາມີ ໔ ເຣື້ອງ ▫ເຣື້ອງນາບຄັນພົໃຫ້ຮ້ອນ ໑ ເຣື້ອງ ▫ເຣື້ອງຂ້າມາຣດາແລະບຸຕຣທັງ ໔ ຄົນຕາຍ ໑ ເຣື້ອງ ▫ເຣື້ອງຂ້າມາຣດາແລະບຸຕຣທັງ ໔ ຄົນບໍ່ຕາຍ ໑ ເຣື້ອງ ▫ເຣື້ອງໃຫ້ຣິດ ໑ ເຣື້ອງ ▫ເຣື້ອງຍິງຫມັນ ໑ ເຣື້ອງ ▫ເຣື້ອງຍິງບໍ່ເປັນຫມັນ ໑ ເຣື້ອງ ▫ເຣື້ອງຈີ້ ໑ ເຣື້ອງ ▫ເຣື້ອງທັບ ໑ ເຣື້ອງ ▫ເຣື້ອງຂ້າຍັກສ໌ ໑ ເຣື້ອງ ▫ເຣື້ອງສົ່ງໄປສູ່ທີ່ມີສັຕວ໌ຮ້າຍແລະຍັກສ໌ດຸ ໙ ເຣື້ອງ ▫ເຣື້ອງສຳຄັນວ່າໃຊ່ ໔ ເຣື້ອງ ▫ເຣື້ອງປະຫາຣ ໓ ເຣື້ອງ ▫ເຣື້ອງພັນນາສວັນຄ໌ ໓ ເຣື້ອງ ▫ເຣື້ອງພັນນານຣົກ ໓ ເຣື້ອງ ▫ເຣື້ອງຕົ້ນໄມ້ທີ່ເມືອງອາລວີ ໓ ເຣື້ອງ ▫ເຣື້ອງເຜົາປ່າ ໓ ເຣື້ອງ ▫ເຣື້ອງບໍ່ໃຫ້ລຳບາກ ໑ ເຣື້ອງ ▫ເຣື້ອງບໍ່ທຳຕາມທ່ານ ໑ ເຣື້ອງ ▫ເຣື້ອງໃຫ້ດື່ມປຽງ ໑ ເຣື້ອງ ▫ເຣື້ອງໃຫ້ດື່ມຢາໂລນໄສວິຣກະ ໑ ເຣື້ອງ

## ເຣື້ອງພັນນາຄຸນຄວາມຕາຍ ໑ ເຣື້ອງ

[໑໗໐] ສມັຍນັ້ນ ພິກສຸຮູບນຶ່ງອາພາທ ພິກສຸທັງຫລາຍໄດ້ພັນນາຄຸນແຫ່ງຄວາມຕາຍໃຫ້ທ່ານຟັງດ້ວຍຄວາມສົງສາຣ ທ່ານເຖິງແກ່ມໍຣນພາພ ພິກສຸເຫລົ່ານັ້ນເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກ ຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ພວກທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໑)

## ເຣື້ອງນັ່ງ ໑ ເຣື້ອງ

ສມັຍນັ້ນ ພິກສຸຜູ້ທຽວບິນທບາຕເປັນວັຕຣຮູບນຶ່ງ ນັ່ງທັບເດັກຊາຍທີ່ເຂົາໃຊ້ຜ້າເກົ່າຄຸມໄວ້ເທິງຕັ່ງເຮັດໃຫ້ເດັກນັ້ນຕາຍ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກອີກຢ່າງນຶ່ງ ພິກສຸທັງຫລາຍ ພິກສຸຍັງບໍ່ໄດ້ພິຈາຣນາແລ້ວບໍ່ເພິງນັ່ງເທິງອາສນະ ພິກສຸໃດນັ່ງຕ້ອງອາບັຕິທຸກກຕ" (ເຣື້ອງທີ ໔)

## ເຣື້ອງສາກ ໑ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງປູລາດອາສນະທີ່ໂຮງອາຫາຣໃນລະແວກບ້ານ ໄດ້ຫຍິບສາກອັນນຶ່ງໃນສາກທີ່ເຂົາພິງກັນໄວ້ ສາກອັນທີ່ສອງລົ້ມຟາດສີສະເດັກຊາຍຄົນນຶ່ງຕາຍ ທ່ານເກີດຄວາມກັງວົລໃຈວ່າເຮົາຕ້ອງອາບັຕິປາຣາຊິກ ຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ" "ຂ້າພຣະພຸທທເຈົ້າບໍ່ຈົງໃຈ ພຣະພຸທທເຈົ້າຂ້າ" "ພິກສຸ ທ່ານບໍ່ຈົງໃຈ ບໍ່ຕ້ອງອາບັຕິ" (ເຣື້ອງທີ ໓)

## ເຣື້ອງໄມ້ສຳລັບທຳຄົກ ໑ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງປູລາດອາສນະທີ່ໂຮງອາຫາຣໃນລະແວກບ້ານ ຢຽບຂອນໄມ້ທີ່ເຂົານຳມາທຳຄົກກິ້ງໄປທັບເດັກຊາຍຄົນນຶ່ງເຖິງຕາຍ ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ" "ຂ້າພຣະພຸທທເຈົ້າບໍ່ຈົງໃຈ ພຣະພຸທທເຈົ້າຂ້າ" "ພິກສຸ ທ່ານບໍ່ຈົງໃຈບໍ່ຕ້ອງອາບັຕິ" (ເຣື້ອງທີ ໔)

## ເຣື່ອງພຣະຂຣິວຕາ ໓ ເຣື່ອງ

ສມັຍນັ້ນ ບິດາແລະບຸຕຣບວຊໃນສຳນັກພິກສຸ ມື້ນຶ່ງເມື່ອເຂົາບອກເວລາອາຫາຣພິກສຸຜູ້ເປັນບຸຕຣ ໄດ້ກ່າວກັບພິກສຸຜູ້ເປັນບິດາວ່າ "ນິມົນຕ໌ໄປເຖີດ ພຣະສົງຂ໌ກຳລັງຄອຍທ່ານຢູ່" ແລ້ວຈັບຫລັງຍູ້ ໄປຈົນພິກສຸຜູ້ເປັນບິດາ ລົ້ມລົງເຖິງແກ່ມໍຣນພາພ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິ ປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ" "ຂ້າພຣະພຸທທເຈົ້າບໍ່ມີ
ຄວາມປະສົງຄ໌ຈະຂ້າ ພຣະພຸທທເຈົ້າຂ້າ" "ພິກສຸ ທ່ານບໍ່ມີຄວາມປະສົງຄ໌ຈະຂ້າ ບໍ່ຕ້ອງອາບັຕິ" (ເຣື່ອງທີ ໕)

ສມັຍນັ້ນ ບິດາແລະບຸຕຣບວຊໃນສຳນັກພິກສຸ ມື້ນຶ່ງເມື່ອເຂົາບອກເວລາອາຫາຣພິກສຸຜູ້ເປັນບຸຕຣ ໄດ້ກ່າວກັບພິກສຸຜູ້ເປັນບິດາວ່າ "ນິມົນຕ໌ໄປເຖີດ ພຣະສົງຂ໌ກຳລັງລໍຖ້າທ່ານຢູ່" ມີຄວາມປະສົງຄ໌ຈະ ຂ້າຈຶ່ງຈັບຫລັງຍູ້ໄປ ພິກສຸຜູ້ເປັນບິດາລົ້ມລົງ ເຖິງແກ່ມໍຣນພາພ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ" "ຂ້າ
ພຣະພຸທທເຈົ້າມີຄວາມປະສົງຄ໌ຈະຂ້າ ພຣະພຸທທເຈົ້າຂ້າ" "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໖)

ສມັຍນັ້ນ ບິດາແລະບຸຕຣບວຊໃນສຳນັກພິກສຸ ມື້ນຶ່ງເມື່ອເຂົາບອກເວລາອາຫາຣ ພິກສຸຜູ້ເປັນບຸຕຣ ໄດ້ກ່າວກັບພິກສຸຜູ້ເປັນບິດາວ່າ "ນິມົນຕ໌ໄປເຖີດ ພຣະສົງຂ໌ກຳລັງລໍຖ້າທ່ານຢູ່" ມີຄວາມປະສົງຄ໌ຈະ ຂ້າຈຶ່ງຈັບຫລັງຍູ້ໄປ ພິກສຸຜູ້ເປັນບິດາລົ້ມລົງແຕ່ບໍ່ເຖິງມໍຣນພາພ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ"
"ຂ້າພຣະພຸທທເຈົ້າມີຄວາມປະສົງຄ໌ຈະຂ້າ ພຣະພຸທທເຈົ້າຂ້າ" "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ" (ເຣື່ອງທີ ໗)

## ເຣື້ອງຊິ້ນຕິດຄໍ ໓ ເຣື້ອງ

[໑໓໑] ສມັຍນັ້ນ ພິກສຸຮູບນຶ່ງກຳລັງສັນອາຫາຣ ຊີ້ນຕິດຄໍ ເພື່ອນອີກຮູບນຶ່ງໄດ້ທຸບທີ່ຄໍຂອງພິກສຸຮູບນັ້ນ ຊີ້ນໄດ້ຫລຸດອອກມາພ້ອມກັບໂລຫິຕ ທ່ານເຖິງແກ່ມໍຣນພາພ ພິກສຸຮູບທີ່ທຸບເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ" "ຂ້າພຣະພຸທທເຈົ້າບໍ່ມີຄວາມປະສົງຄ໌ຈະຂ້າ ພຣະພຸທທເຈົ້າຂ້າ" "ພິກສຸ ທ່ານບໍ່ມີຄວາມປະ ສົງຄ໌ຈະຂ້າ ບໍ່ຕ້ອງອາບັຕິ" (ເຣື້ອງທີ ໓)

ສມັຍນັ້ນ ພິກສຸຮູບນຶ່ງກຳລັງສັນອາຫາຣ ຊີ້ນຕິດຄໍ ພິກສຸອີກຮູບນຶ່ງມີຄວາມປະສົງຄ໌ຈະຂ້າຈຶ່ງໄດ້ທຸບທີ່ຄໍ ຊີ້ນ ຫລຸດອອກມາພ້ອມກັບໂລຫິຕ ທ່ານເຖິງແກ່ມໍຣນພາພ ພິກສຸຮູບທີ່ທຸບເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ" "ຂ້າພຣະພຸທທເຈົ້າມີຄວາມປະສົງຄ໌ຈະຂ້າ ພຣະພຸທທເຈົ້າຂ້າ" "ພິກສຸ ທ່ານຕ້ອງອາບັຕິ
ປາຣາຊິກ" (ເຣື້ອງທີ ໙)

ສມັຍນັ້ນ ພິກສຸຮູບນຶ່ງກຳລັງສັນອາຫາຣ ຊີ້ນຕິດຄໍ ພິກສຸອີກຮູບນຶ່ງມີຄວາມປະສົງຄ໌ຈະຂ້າຈຶ່ງໄດ້ທຸບທີ່ຄໍ ຊີ້ນ ຫລຸດອອກມາພ້ອມກັບໂລຫິຕ ແຕ່ທ່ານບໍ່ເຖິງແກ່ມໍຣນພາພ ພິກສຸຮູບທີ່ທຸບເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ" "ຂ້າພຣະພຸທທເຈົ້າມີຄວາມປະສົງຄ໌ຈະຂ້າ ພຣະພຸທທເຈົ້າຂ້າ" "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ" (ເຣື້ອງທີ ໑໐)

## ເຣື້ອງຍາພິສ ໔ ເຣື້ອງ

ສມັຍນັ້ນ ພິກສຸຜູ້ທຽວບິນທບາຕເປັນວັຕຣຮູບນຶ່ງໄດ້ອາຫາຣບິນທບາຕທີ່ເຈືອປົນຍາພິສມາແລ້ວນຳກັບໄປຖວາຍແກ່ພິກສຸທັງຫລາຍໃຫ້ສັນກ່ອນ ພິກສຸເຫລົ່ານັ້ນເຖິງແກ່ມໍຣນພາພ ພິກສຸເຈົ້າຂອງບິນທບາຕເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະ ອົງຄ໌ ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ" "ຂ້າພຣະພຸທທເຈົ້າບໍ່ຮູ້ ພຣະພຸທທເຈົ້າຂ້າ" "ພິກສຸ ທ່ານບໍ່ຮູ້ບໍ່ຕ້ອງອາບັຕິ" (ເຣື້ອງທີ ໑໑)

ສມັຍນັ້ນ ພິກສຸຮູບນຶ່ງຕ້ອງການທົດລອງຈຶ່ງໃຫ້ຍາພິສແກ່ພິກສຸອີກຮູບນຶ່ງສັນ ທ່ານເຖິງແກ່ມໍຣນພາພ ພິກສຸຜູ້ທົດລອງຍາພິສເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງ

ນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸທ່ານຄິດຢ່າງໃດ" "ຂ້າພຣະພຸທທເຈົ້າມີຄວາມປະສົງຄ໌ຈະທົດລອງ ພຣະພຸທທເຈົ້າຂ້າ" "ພິກສຸທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ" (ເຣື່ອງທີ ໑໔)

## ເຣື່ອງຕຽມພື້ນທີ່ສ້າງວິຫາຣ ໓ ເຣື່ອງ

[໑໓໔] ສມັຍນັ້ນ ພວກພິກສຸຊາວເມືອງອາລະວີ ກຳລັງຕຽມພື້ນທີ່ສ້າງວິຫາຣ ພິກສຸຮູບນຶ່ງຢູ່ຂ້າງລຸ່ມຍົກສີລາສົ່ງຂຶ້ນໄປ ສີລາທີ່ພິກສຸຮູບທີ່ຢູ່ຂ້າງເທິງຮັບໄວ້ບໍ່ດີ ພົກຕົກລົງ ທັບສີສະພິກສຸຮູບທີ່ຢູ່ຂ້າງລຸ່ມຈົນເຖິງແກ່ມໍຣນພາພ ພິກສຸຮູບທີ່ຢູ່ຂ້າງເທິງເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ" "ຂ້າພຣະພຸທທເຈົ້າບໍ່ຈົງໃຈ ພຣະພຸທທເຈົ້າຂ້າ" "ພິກສຸທ່ານບໍ່ຈົງໃຈ ບໍ່ຕ້ອງອາບັຕິ" (ເຣື່ອງທີ ໑໓)

ສມັຍນັ້ນ ພວກພິກສຸຊາວເມືອງອາລະວີກຳລັງຕຽມພື້ນທີ່ສ້າງວິຫາຣ ພິກສຸຮູບນຶ່ງຢູ່ຂ້າງລຸ່ມຍົກສີລາສົ່ງຂຶ້ນໄປ ພິກສຸຮູບທີ່ຢູ່ຂ້າງເທິງມີຄວາມປະສົງຄ໌ຈະຂ້າຈຶ່ງປ່ອຍສີລາລົງໃສ່ສີສະພິກສຸຮູບທີ່ຢູ່ຂ້າງລຸ່ມຈົນເຖິງແກ່ມໍຣນພາພ ພິກສຸຮູບທີ່ປ່ອຍສີລາລົງມາເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ" "ຂ້າພຣະພຸທທເຈົ້າມີຄວາມ
ປະສົງຄ໌ຈະຂ້າ ພຣະພຸທທເຈົ້າຂ້າ" "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໑໔)

ສມັຍນັ້ນ ພວກພິກສຸຊາວເມືອງອາລະວີຊ່ອຍກັນທຳກາຣກໍ່ສ້າງວິຫາຣ ພິກສຸຮູບນຶ່ງຢູ່ຂ້າງລຸ່ມຍົກສີລາສົ່ງຂຶ້ນໄປ ພິກສຸຮູບທີ່ຢູ່ຂ້າງເທິງມີຄວາມປະສົງຄ໌ຈະຂ້າພິກສຸຮູບທີ່ຢູ່ຂ້າງລຸ່ມ ຈຶ່ງປ່ອຍສີລາລົງໃສ່ສີສະ ແຕ່ທ່ານບໍ່ເຖິງມໍຣນພາພ ພິກສຸຮູບທີ່ຢູ່ຂ້າງເທິງເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ" "ຂ້າພຣະພຸທທເຈົ້າ ມີຄວາມປະສົງຄ໌ຈະຂ້າ ພຣະພຸທທເຈົ້າຂ້າ" "ພິກສຸທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ" (ເຣື່ອງທີ ໑໕)

## ເຣື່ອງອິດ ໓ ເຣື່ອງ

ສມັຍນັ້ນ ພວກພິກສຸຊາວເມືອງອາຣຸວີຊ່ອຍກັນທຳການກໍ່ຝາວິຫານ ພິກສຸຮູບນຶ່ງຢູ່ຂ້າງລຸ່ມສົ່ງອິດຂຶ້ນໄປ ອິດທີ່ພິກສຸຮູບທີ່ຢູ່ຂ້າງເທິງຮັບໄວ້ບໍ່ດີ ພິກຕົກລົງ ທັບສີສະພິກສຸຮູບທີ່ຢູ່ຂ້າງລຸ່ມເຖິງແກ່ມໍຣນພາພ ພິກສຸຮູບທີ່ຢູ່ຂ້າງເທິງເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ" "ຂ້າພຣະພຸທທເຈົ້າບໍ່ຈົງໃຈ ພຣະພຸທທເຈົ້າຂ້າ" "ພິກສຸທ່ານບໍ່ຈົງໃຈ ບໍ່ຕ້ອງອາບັຕິ" (ເຣື່ອງທີ ໑໕)

ສມັຍນັ້ນ ພວກພິກສຸຊາວເມືອງອາຣຸວີຊ່ອຍກັນທຳການກໍ່ຝາວິຫານ ພິກສຸຮູບນຶ່ງຢູ່ຂ້າງລຸ່ມສົ່ງອິດຂຶ້ນໄປ ພິກສຸຮູບທີ່ຢູ່ຂ້າງເທິງມີຄວາມປະສົງຄ໌ຈະຂ້າ ຈຶ່ງປ່ອຍອິດລົງເທິງສີສະພິກສຸຮູບທີ່ຢູ່ຂ້າງລຸ່ມເຖິງແກ່ມໍຣນພາພ ພິກສຸຮູບທີ່ປ່ອຍອິດລົງມາເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ" "ຂ້າພຣະພຸທທເຈົ້າມີຄວາມປະສົງຄ໌ຈະຂ້າ ພຣະພຸທທເຈົ້າຂ້າ" "ພິກສຸທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໑໖)

ສມັຍນັ້ນ ພວກພິກສຸຊາວເມືອງອາຣຸວີ ຊ່ອຍກັນທຳການກໍ່ສ້າງຝາວິຫານ ພິກສຸຮູບນຶ່ງຢູ່ຂ້າງລຸ່ມສົ່ງອິດຂຶ້ນໄປ ພິກສຸຮູບທີ່ຢູ່ຂ້າງເທິງມີຄວາມປະສົງຄ໌ຈະຂ້າ ຈຶ່ງປ່ອຍອິດລົງເທິງສີສະຂອງພິກສຸຮູບທີ່ຢູ່ຂ້າງລຸ່ມ ແຕ່ພິກສຸຮູບທີ່ຢູ່ຂ້າງລຸ່ມບໍ່ເຖິງແກ່ມໍຣນພາພ ພິກສຸຮູບທີ່ປ່ອຍອິດລົງມາເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກ ຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງ ໃດ" "ຂ້າພຣະພຸທທເຈົ້າມີຄວາມປະສົງຄ໌ຈະຂ້າ ພຣະພຸທທເຈົ້າຂ້າ" "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ" (ເຣື້ອງທີ ໑໗)

## ເຣື້ອງມີດ ໓ ເຣື້ອງ

[໑໗໓] ສມັຍນັ້ນ ພວກພິກສຸຊາວເມືອງອາຣຸວີຊ່ອຍກັນທຳການກໍ່ສ້າງ ພິກສຸຮູບນຶ່ງຢູ່ຂ້າງລຸ່ມສົ່ງມີດຂຶ້ນໄປ ມີດທີ່ພິກສຸຮູບທີ່ຢູ່ຂ້າງເທິງຮັບໄວ້ບໍ່ດີ ພິກຕົກລົງໃສ່ສີສະພິກສຸຮູບທີ່ຢູ່ຂ້າງລຸ່ມເຖິງແກ່ມໍຣນພາພ ພິກສຸຮູບທີ່ທຳຢູ່ຂ້າງເທິງເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ" "ຂ້າພຣະພຸທທເຈົ້າບໍ່ຈົງໃຈ ພຣະພຸທທເຈົ້າຂ້າ" "ພິກສຸ ທ່ານບໍ່ຈົງໃຈ ບໍ່ຕ້ອງອາບັຕິ" (ເຣື້ອງທີ ໑໘)

ສມັຍນັ້ນ ພວກພິກສຸຊາວເມືອງອາຣວີຊ່ອຍກັນທຳການກໍ່ສ້າງ ພິກສຸຮູບນຶ່ງຢູ່ຂ້າງລຸ່ມສົ່ງມິດຂຶ້ນໄປ ພິກສຸຮູບທີ່ຢູ່ຂ້າງເທິງມີຄວາມປະສົງຄ໌ຈະຂ້າຈຶ່ງປ່ອຍມີດລົງເທິງສີສະພິກສຸຮູບທີ່ຢູ່ຂ້າງລຸ່ມເຖິງແກ່ມໍຣນພາພ ພິກສຸຮູບທີ່ປ່ອຍມີດຕົກລົງ ມາເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ" "ຂ້າພຣະພຸທທເຈົ້າມີຄວາມປະ ສົງຄ໌ຈະຂ້າ ພຣະພຸທທເຈົ້າຂ້າ" "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໘໐)

ສມັຍນັ້ນ ພວກພິກສຸຊາວເມືອງອາຣວີຊ່ອຍກັນທຳການກໍ່ສ້າງ ພິກສຸຮູບນຶ່ງຢູ່ຂ້າງລຸ່ມສົ່ງມິດຂຶ້ນໄປ ພິກສຸຮູບທີ່ຢູ່ຂ້າງເທິງມີຄວາມປະສົງຄ໌ຈະຂ້າ ຈຶ່ງປ່ອຍມີດລົງເທິງສີສະຂອງພິກສຸຮູບທີ່ຢູ່ຂ້າງລຸ່ມ ແຕ່ພິກສຸຮູບທີ່ຢູ່ຂ້າງລຸ່ມບໍ່ເຖິງແກ່ມໍຣນພາພ ພິກສຸຮູບທີ່ປ່ອຍມີດຕົກລົງ ມາເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກ ຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດ
ຢ່າງໃດ" "ຂ້າພຣະພຸທທເຈົ້າມີຄວາມປະສົງຄ໌ຈະຂ້າ ພຣະພຸທທເຈົ້າຂ້າ" "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ" (ເຣື້ອງທີ ໘໑)

## ເຣື້ອງໄມ້ກອນ ໖ ເຣື້ອງ

ສມັຍນັ້ນ ພວກພິກສຸຊາວເມືອງອາຣວີຊ່ອຍກັນທຳການກໍ່ສ້າງ ພິກສຸຮູບນຶ່ງຢູ່ຂ້າງລຸ່ມ ຍົກໄມ້ກອນຫລັງຄາສົ່ງຂຶ້ນໄປ ໄມ້ກອນຫລັງຄາທີ່ພິກສຸຮູບທີ່ຢູ່ຂ້າງເທິງຮັບໄວ້ບໍ່ດີ ພົກຕົກລົງໃສ່ສີສະພິກສຸຮູບທີ່ຢູ່ຂ້າງລຸ່ມເຖິງແກ່ມໍຣນພາພ ພິກສຸຮູບທີ່ທຳໄມ້ກອນພົກຕົກລົງ ມາເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ" "ຂ້າພຣະພຸທທເຈົ້າບໍ່ຈົງໃຈ ພຣະພຸທທເຈົ້າຂ້າ" "ພິກສຸ ທ່ານບໍ່ຈົງໃຈ ບໍ່ຕ້ອງອາບັຕິ" (ເຣື້ອງທີ ໘໔)

ສມັຍນັ້ນ ພວກພິກສຸຊາວເມືອງອາຣວີຊ່ອຍກັນທຳການກໍ່ສ້າງ ພິກສຸຮູບນຶ່ງຢູ່ຂ້າງລຸ່ມ ຍົກໄມ້ກອນຫລັງຄາສົ່ງຂຶ້ນໄປ ພິກສຸຮູບທີ່ຢູ່ຂ້າງເທິງມີຄວາມປະສົງຄ໌ຈະຂ້າຈຶ່ງປ່ອຍໄມ້ກອນຫລັງຄາລົງເທິງສີສະພິກສຸຮູບທີ່ຢູ່ຂ້າງລຸ່ມເຖິງແກ່ມໍຣນພາພ ພິກສຸຮູບທີ່ປ່ອຍໄມ້ກອນຫລັງຄາລົງມາເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກ ຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົ

ງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ" "ຂ້າພຣະພຸທທເຈົ້າມີຄວາມປະສົງຄ໌ຈະຂ້າ ພຣະພຸທທເຈົ້າຂ້າ" "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໘໓)

ສມັຍນັ້ນ ພວກພິກສຸຊາວເມືອງອາຣວີຊ່ວຍກັນທຳການກໍ່ສ້າງ ພິກສຸຮູບນຶ່ງຢູ່ຂ້າງລຸ່ມ ຍົກໄມ້ກອນ ຫລັງຄາສົ່ງຂຶ້ນໄປ ພິກສຸຮູບທີ່ຢູ່ຂ້າງເທິງມີຄວາມປະສົງຄ໌ຈະຂ້າ ຈຶ່ງປ່ອຍໄມ້ກອນຫລັງຄາລົງເທິງ ສີສະພິກສຸຮູບທີ່ຢູ່ຂ້າງລຸ່ມແຕ່ບໍ່ເຖິງມໍຣນພາພ ພິກສຸຮູບທີ່ປ່ອຍໄມ້ກອນຫລັງຄາລົງມາເກີດຄວາມ ກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົ ງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານ
ຄິດຢ່າງໃດ" "ຂ້າພຣະພຸທທເຈົ້າມີຄວາມປະສົງຄ໌ຈະຂ້າ ພຣະພຸທທເຈົ້າຂ້າ" "ພິກສຸ ທ່ານບໍ່ຕ້ອງ ອາບັຕິປາຣາ ຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ" (ເຣື່ອງທີ ໘໔)

## ເຣື້ອງນັ່ງຮ້ານ ໖ ເຣື້ອງ

ສມັຍນັ້ນ ພວກພິກສຸຊາວເມືອງອາຣວີຊ່ວຍກັນຜູກນັ່ງຮ້ານທຳການກໍ່ສ້າງ ພິກສຸຮູບນຶ່ງບອກອີກຮູ ບນຶ່ງວ່າ "ທ່ານຈົ່ງຢືນຜູກທີ່ບ່ອນນີ້" ພິກສຸນັ້ນຈຶ່ງຢືນຜູກທີ່ນັ້ນ ໄດ້ພິກຕົກລົງມາເຖິງແກ່ມໍຣນພາພ ພິກສຸຮູບທີ່ບອກເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລ ພຣະຜູ້ມີພຣະພາຄໃຫ້ຊົງ ຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ" "ຂ້າພຣະພຸທທ ເຈົ້າບໍ່ມີຄວາມປະສົງຄ໌ຈະຂ້າ ພຣະພຸທທເຈົ້າຂ້າ" "ພິກສຸ ທ່ານບໍ່ມີຄວາມປະສົງຄ໌ຈະຂ້າ ບໍ່ຕ້ອງ ອາບັຕິ" (ເຣື້ອງທີ ໘໕)

ສມັຍນັ້ນ ພວກພິກສຸຊາວເມືອງອາຣວີຊ່ວຍກັນຜູກນັ່ງຮ້ານທຳການກໍ່ສ້າງ ພິກສຸຮູບນຶ່ງມີຄວາມ ປະສົງຄ໌ຈະຂ້າບອກອີກຮູບນຶ່ງວ່າ "ທ່ານຈົ່ງຢືນຜູກທີ່ບ່ອນນີ້" ພິກສຸຮູບນັ້ນຈຶ່ງຢືນຜູກທີ່ບ່ອນນັ້ນ ໄດ້ພິກຕົກລົງມາເຖິງແກ່ມໍຣນພາພ ພິກສຸຮູບທີ່ບອກເກີດຄວາມກັງວົລໃຈວ່າເຮົາຕ້ອງອາບັຕິ ປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ" "ຂ້າພຣະພຸທທເຈົ້າມີຄວາມປະສົງຄ໌ຈະຂ້າ ພຣະພຸທທເຈົ້າຂ້າ" "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໘໖)

ສມັຍນັ້ນ ພວກພິກສຸຊາວເມືອງອາຣວີຊ່ວຍກັນຜູກນັ່ງຮ້ານທຳການກໍ່ສ້າງ ພິກສຸຮູບນຶ່ງມີຄວາມ ປະສົງຄ໌ຈະຂ້າບອກອີກຮູບນຶ່ງວ່າ "ທ່ານຈົ່ງຢືນຜູກທີ່ບ່ອນນີ້" ພິກສຸຮູບນັ້ນຈຶ່ງຢືນຜູກຢູ່ທີ່ບ່ອນນັ້ນ

ໄດ້ພົກຕົກລົງມາ ແຕ່ບໍ່ເຖິງແກ່ມໍຣນພາພ ພິກສຸຮູບທີ່ບອກເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ" "ຂ້າພຣະພຸທທເຈົ້າມີຄວາມປະສົງຄ໌ຈະຂ້າ ພຣະພຸທທເຈົ້າຂ້າ" "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ" (ເຣື້ອງທີ ໔໗)

## ເຣື້ອງໃຫ້ລົງຈາກຫລັງຄາ ໓ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງມຸງຫລັງຄາວິຫາຣເສັດແລ້ວຈະລົງ ອີກຮູບນຶ່ງບອກທ່ານວ່າ "ນິມົນຕ໌ທ່ານລົງມາທາງນີ້" ພິກສຸນັ້ນຈຶ່ງລົງທາງນັ້ນ ໄດ້ພົກຕົກລົງມາເຖິງແກ່ມໍຣນພາພ ພິກສຸຮູບທີ່ບອກເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ" "ຂ້າພຣະພຸທທເຈົ້າບໍ່ມີຄວາມປະສົງຄ໌ຈະຂ້າ ພຣະພຸທທເຈົ້າຂ້າ" "ພິກສຸ ທ່ານບໍ່ມີຄວາມປະສົງຄ໌ຈະຂ້າ ບໍ່ຕ້ອງອາບັຕິ" (ເຣື້ອງທີ ໔໘)

ສມັຍນັ້ນ ພິກສຸຮູບນຶ່ງມຸງຫລັງຄາວິຫາຣເສັດແລ້ວຈະລົງ ອີກຮູບນຶ່ງມີຄວາມປະສົງຄ໌ຈະຂ້າບອກທ່ານວ່າ "ນິມົນຕ໌ທ່ານລົງມາທາງນີ້" ພິກສຸຮູບນັ້ນຈຶ່ງລົງທາງນັ້ນໄດ້ພົກຕົກລົງ ມາເຖິງແກ່ມໍຣນພາພ ພິກສຸຮູບທີ່ບອກເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງ ຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ" "ຂ້າພຣະພຸທທເຈົ້າມີຄວາມປະສົງຄ໌ຈະຂ້າ ພຣະພຸທທເຈົ້າຂ້າ" "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໔໙)

ສມັຍນັ້ນ ພິກສຸຮູບນຶ່ງມຸງຫລັງຄາວິຫາຣເສັດແລ້ວຈະລົງ ອີກຮູບນຶ່ງມີຄວາມປະສົງຄ໌ຈະຂ້າບອກທ່ານວ່າ "ນິມົນຕ໌ທ່ານລົງມາທາງນີ້" ພິກສຸຮູບນັ້ນຈຶ່ງລົງທາງນັ້ນ ໄດ້ພົກຕົກລົງ ມາແຕ່ບໍ່ເຖິງແກ່ມໍຣນພາພ ພິກສຸຮູບທີ່ບອກເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ" "ຂ້າພຣະພຸທທເຈົ້າມີຄວາມປະສົງຄ໌ຈະຂ້າ
ພຣະພຸທທເຈົ້າຂ້າ" "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ" (ເຣື້ອງທີ ໕໐)

## ເຣື້ອງໂດດຫນ້າຜາ ໔ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງເກີດຄວາມເບື່ອຫນ່າຍຈຶ່ງຂຶ້ນພູເຂົາຄິຊຸຢກູຕແລ້ວໂຕນລົງທາງຫນ້າຜາທັບຊ່າງສານຄົນ ນຶ່ງຕາຍ ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຄິດຢ່າງໃດ" "ຂ້າພຣະພຸທຫເຈົ້າບໍ່ມີຄວາມປະສົງຄ໌ຈະຂ້າ ພຣະພຸທຫເຈົ້າຂ້າ" "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ອີກຢ່າງນຶ່ງ ພິກສຸທັງຫລາຍ ພິກສຸບໍ່ເພິງເຮັດໃຫ້ ຕົນເອງຕົກ ພິກສຸໃດເຮັດໃຫ້ຕົກ ຕ້ອງອາບັຕິທຸກກຕ" (ເຣື້ອງທີ ໖໑)

ສມັຍນັ້ນ ພວກພິກສຸສັພພັຄຄີຍ໌ຂຶ້ນພູເຂົາຄິຊຸຢກູຕ ກິ້ງສີລາຫລິ້ນ ສີລາຕົກທັບຄົນລ້ຽງໂຄຄົນນຶ່ງຕາຍ ພວກທ່ານເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ພວກທ່ານບໍ່ຕ້ອງອາບັຕິປາຣາຊິກ ອີກຢ່າງນຶ່ງ ພິກສຸທັງຫລາຍ ພິກສຸບໍ່ເພິງກິ້ງສີລາຫລິ້ນ ພິກສຸໃດກິ້ງ ຕ້ອງອາບັຕິທຸກກຕ" (ເຣື້ອງທີ ໖໒)

ເຣື້ອງອົບຕົວ ໖ ເຣື້ອງ

[໑໗໔] ສມັຍນັ້ນ ພິກສຸຮູບນຶ່ງອາພາທ ພິກສຸທັງຫລາຍຈຶ່ງໃຫ້ທ່ານອົບຕົວຈົນເຖິງແກ່ມໍຣນພາພ ພວກທ່ານເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພວກທ່ານຄິດຢ່າງໃດ" "ພວກຂ້າພຣະພຸທຫເຈົ້າບໍ່ມີຄວາມປະສົງຄ໌ຈະຂ້າ ພຣະພຸທຫເຈົ້າຂ້າ" "ພວກທ່ານບໍ່ມີຄວາມປະສົງຄ໌ຈະຂ້າ ບໍ່ຕ້ອງອາບັຕິ" (ເຣື້ອງທີ ໖໓)

ສມັຍນັ້ນ ພິກສຸຮູບນຶ່ງອາພາທ ພິກສຸທັງຫລາຍມີຄວາມປະສົງຄ໌ຈະຂ້າຈຶ່ງໃຫ້ທ່ານອົບຕົວຈົນເຖິງແກ່ມໍຣນພາພ ພວກທ່ານເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸທັງຫລາຍ ພວກທ່ານຄິດຢ່າງໃດ" "ພວກຂ້າພຣະພຸທຫເຈົ້າມີຄວາມປະສົງຄ໌ຈະຂ້າ ພຣະພຸທຫເຈົ້າຂ້າ" "ພິກສຸທັງຫລາຍ ພວກທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໖໔)

ສມັຍນັ້ນ ພິກສຸຮູບນຶ່ງອາພາທ ພິກສຸທັງຫລາຍມີຄວາມປະສົງຄ໌ຈະຂ້າຈຶ່ງໃຫ້ທ່ານອົບຕົວ ແຕ່ທ່ານບໍ່ເຖິງແກ່ມໍຣນພາພ ພິກສຸເຫລົ່ານັ້ນເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິ

ປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸທັງຫລາຍ ພວກທ່ານຄິດຢ່າງໃດ" "ພວກຂ້າພຣະພຸທທເຈົ້າມີຄວາມປະສົງຄ໌ຈະຂ້າ ພຣະພຸທທເຈົ້າຂ້າ" "ພິກສຸທັງຫລາຍ ພວກທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ"
(ເຣື່ອງທີ ໓໕)

## ເຣື້ອງນັຕຖຸ໌ຍາ(ຍັດຢາເຂົ້າທາງຮູດັງ) ໓ ເຣື່ອງ

ສມັຍນັ້ນ ພິກສຸຮູບນຶ່ງປວດສີສະ ພິກສຸທັງຫລາຍຈຶ່ງໃຫ້ທ່ານນັຕຖຸ໌ຍາ ທ່ານເຖິງແກ່ມໍຣນພາພ ພິກສຸເຫລົ່ານັ້ນເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸທັງຫລາຍ ພວກທ່ານຄິດຢ່າງໃດ" "ພວກຂ້າພຣະພຸທທເຈົ້າບໍ່ມີຄວາມປະສົງຄ໌ຈະຂ້າ ພຣະພຸທທເຈົ້າຂ້າ" "ພິກສຸທັງຫລາຍ ພວກທ່ານບໍ່ມີຄວາມປະສົງຄ໌ຈະຂ້າ ບໍ່ຕ້ອງອາບັຕິ"
(ເຣື່ອງທີ ໓໖)

ສມັຍນັ້ນ ພິກສຸຮູບນຶ່ງປວດສີສະ ພິກສຸທັງຫລາຍມີຄວາມປະສົງຄ໌ຈະຂ້າຈຶ່ງໃຫ້ທ່ານນັຕຖຸ໌ຍາຈົນເຖິງແກ່ມໍຣນພາພ ພິກສຸເຫລົ່ານັ້ນເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸທັງຫລາຍ ພວກທ່ານຄິດຢ່າງໃດ" "ພວກຂ້າພຣະພຸທທເຈົ້າມີຄວາມປະສົງຄ໌ຈະຂ້າ ພຣະພຸທທເຈົ້າຂ້າ" "ພິກສຸທັງຫລາຍ ພວກທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໓໗)

ສມັຍນັ້ນ ພິກສຸຮູບນຶ່ງປວດສີສະ ພິກສຸທັງຫລາຍມີຄວາມປະສົງຄ໌ຈະຂ້າຈຶ່ງໃຫ້ທ່ານນັຕຖຸ໌ຍາ ແຕ່ທ່ານບໍ່ເຖິງແກ່ມໍຣນພາພ ພິກສຸເຫລົ່ານັ້ນເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸທັງຫລາຍ ພວກທ່ານຄິດຢ່າງໃດ" "ພວກຂ້າພຣະພຸທທເຈົ້າມີຄວາມປະສົງຄ໌ຈະຂ້າ ພຣະພຸທທເຈົ້າຂ້າ" "ພິກສຸທັງຫລາຍ ພວກທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ"
(ເຣື່ອງທີ ໓໘)

## ເຣື້ອງນວດ ໓ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງອາພາທ ພິກສຸທັງຫລາຍຈຶ່ງຊ່ອຍກັນນວດຄັ້ນທ່ານ ທ່ານເຖິງແກ່ມໍຣນພາພ ພິກສຸເຫລົ່ານັ້ນເກີດກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງ ຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸທັງຫລາຍ ພວກທ່ານຄິດຢ່າງໃດ" "ພວກຂ້າພຣະພຸທທເຈົ້າບໍ່ມີຄວາມປະສົງຄ໌ຈະຂ້າ ພຣະພຸທທເຈົ້າຂ້າ" "ພິກສຸທັງຫລາຍ ພວກທ່ານບໍ່ມີຄວາມປະສົງຄ໌ຈະຂ້າ ບໍ່ຕ້ອງອາບັຕິ" (ເຣື່ອງທີ ໓໙)

ສມັຍນັ້ນ ພິກສຸຮູບນຶ່ງອາພາທ ພິກສຸທັງຫລາຍມີຄວາມປະສົງຄ໌ຈະຂ້າຈຶ່ງຊ່ອຍກັນນວດຄັ້ນທ່ານຈົນເຖິງແກ່ມໍຣ ນພາພ ພິກສຸເຫລົ່ານັ້ນເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸທັງຫລາຍ ພວກທ່ານຄິດຢ່າງໃດ" "ພວກຂ້າພຣະພຸທທເຈົ້າມີຄວາມປະສົງຄ໌ຈະຂ້າ ພຣະພຸທທເຈົ້າຂ້າ" "ພິກສຸທັງຫລາຍພວກທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໔໐ )

ສມັຍນັ້ນ ພິກສຸຮູບນຶ່ງອາພາທ ພິກສຸທັງຫລາຍມີຄວາມປະສົງຄ໌ຈະຂ້າ ຈຶ່ງຊ່ອຍກັນນວດຄັ້ນທ່ານ ແຕ່ທ່ານບໍ່ເຖິງແກ່ມໍຣນພາພ ພິກສຸເຫລົ່ານັ້ນເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸທັງຫລາຍ ພວກທ່ານຄິດຢ່າງໃດ" "ພວກຂ້າພຣະພຸທທເຈົ້າມີຄວາມປະສົງຄ໌ຈະຂ້າ ພຣະພຸທທເຈົ້າຂ້າ" "ພິກສຸທັງຫລາຍ ພວກທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ" (ເຣື້ອງ ໔໑)

## ເຣື້ອງໃຫ້ອາບນ້ຳ ໓ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງອາພາທ ພິກສຸທັງຫລາຍຈຶ່ງຊ່ອຍກັນອາບນ້ຳໃຫ້ທ່ານ ທ່ານເຖິງແກ່ມໍຣນພາພ ພິກສຸເຫລົ່ານັ້ນເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸທັງຫລາຍ ພວກທ່ານຄິດຢ່າງໃດ" "ພວກຂ້າພຣະພຸທທເຈົ້າບໍ່ມີຄວາມປະສົງຄ໌ຈະຂ້າ ພຣະພຸທທເຈົ້າຂ້າ" "ພິກສຸທັງຫລາຍ ພວກທ່ານບໍ່ມີຄວາມປະສົງຄ໌ຈະຂ້າ ບໍ່ຕ້ອງອາບັຕິ" (ເຣື້ອງທີ ໔໔ )

ສມັຍນັ້ນ ພິກສຸນຶ່ງຮູປອາພາທ ພິກສຸທັງຫລາຍມີຄວາມປະສົງຄ໌ຈະຂ້າ ຈຶ່ງຊ່ອຍກັນອາບນ້ຳໃຫ້ທ່ານ ທ່ານເຖິງແກ່ມໍຣນພາພ ພິກສຸເຫລົ່ານັ້ນເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິ

ປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລແກ່ພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸທັງຫລາຍ ພວກທ່ານຄິດຢ່າງໃດ" "ພວກຂ້າພຣະພຸທທເຈົ້າມີຄວາມປະສົງຄ໌ຈະຂ້າ ພຣະພຸທທເຈົ້າຂ້າ" "ພິກສຸທັງຫລາຍ ພວກທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໔໓)

ສມັຍນັ້ນ ພິກສຸຮູບນຶ່ງອາພາທ ພິກສຸທັງຫລາຍມີຄວາມປະສົງຄ໌ຈະຂ້າ ຈຶ່ງຊ່ວຍກັນອາບນ້ຳໃຫ້ທ່ານ ແຕ່ທ່ານບໍ່ເຖິງແກ່ມໍຣນພາພ ພິກສຸເຫລົ່ານັ້ນເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸທັງຫລາຍ ພວກທ່ານຄິດຢ່າງໃດ" "ພວກຂ້າພຣະພຸທທເຈົ້າມີຄວາມປະສົງຄ໌ຈະຂ້າ ພຣະພຸທທເຈົ້າຂ້າ" "ພິກສຸທັງຫລາຍ ພວກທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ" (ເຣື່ອງທີ ໔໔)

## ເຣື້ອງໃຫ້ທານ້ຳມັນ ໓ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງອາພາທ ພິກສຸທັງຫລາຍຊ່ວຍກັນເອົານ້ຳມັນມາທາໃຫ້ທ່ານ ທ່ານເຖິງແກ່ມໍຣນພາພ ພິກສຸເຫລົ່ານັ້ນເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸທັງຫລາຍ ພວກທ່ານຄິດຢ່າງໃດ" "ພວກຂ້າພຣະພຸທທເຈົ້າບໍ່ມີຄວາມປະສົງຄ໌ຈະຂ້າ ພຣະພຸທທເຈົ້າຂ້າ" "ພິກສຸທັງຫລາຍ ພວກທ່ານບໍ່ມີຄວາມປະສົງຄ໌ຈະຂ້າ ບໍ່ຕ້ອງອາບັຕິ" (ເຣື່ອງທີ ໔໕ )

ສມັຍນັ້ນ ພິກສຸຮູບນຶ່ງອາພາທ ພິກສຸທັງຫລາຍມີຄວາມປະສົງຄ໌ຈະຂ້າຈຶ່ງຊ່ວຍກັນເອົານ້ຳມັນມາທາໃຫ້ທ່ານ ທ່ານເຖິງແກ່ມໍຣນພາພ ພິກສຸເຫລົ່ານັ້ນເກີດຄວາມກັງວົລໃຈວ່າພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸທັງຫລາຍ ພວກທ່ານຄິດ ຢ່າງໃດ" "ພວກຂ້າພຣະພຸທທເຈົ້າມີຄວາມປະສົງຄ໌ຈະຂ້າ ພຣະພຸທທເຈົ້າຂ້າ" "ພິກສຸທັງຫລາຍ ພວກທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໔໖)

ສມັຍນັ້ນ ພິກສຸຮູບນຶ່ງອາພາທ ພິກສຸທັງຫລາຍມີຄວາມປະສົງຄ໌ຈະຂ້າຈຶ່ງຊ່ວຍກັນເອົານ້ຳມັນມາທາໃຫ້ທ່ານ ແຕ່ທ່ານບໍ່ເຖິງແກ່ມໍຣນພາພ ພິກສຸເຫລົ່ານັ້ນເກີດຄວາມກັງວົລໃຈວ່າພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸທັງຫລາຍ ພວກທ່ານຄິດຢ່າງໃດ" "ຂ້າພຣະພຸທທເຈົ້າທັງຫລາຍມີຄວາມປະສົງຄ໌ຈະຂ້າ

ພຣະພຸທ<u>ທ</u>ເຈົ້າຂ້າ" "<u>ພິ</u>ກສຸທັງຫລາຍ ພວກທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ" (ເຣື້ອງທີ ໔໗)

## ເຣື້ອງໃຫ້ລຸກຂຶ້ນ ໓ ເຣື້ອງ

[໑໗໕] ສມັຍນັ້ນ <u>ພິ</u>ກສຸຮູບນຶ່ງອາພາ<u>ທ</u> <u>ພິ</u>ກສຸທັງຫລາຍຈຶ່ງຊ່ອຍກັນໂຈມໃຫ້ທ່ານລຸກຂຶ້ນ ທ່ານເຖິງແກ່ມໍຣ<u>ນ</u><u>ພ</u>າພ <u>ພິ</u>ກສຸເຫລົ່ານັ້ນເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະ<u>ພ</u>າຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "<u>ພິ</u>ກສຸທັງຫລາຍ ພວກທ່ານຄິດຢ່າງໃດ" "ພວກຂ້າພຣະພຸທ<u>ທ</u>ເຈົ້າບໍ່ມີຄວາມປະສົງຄ໌ຈະຂ້າ ພຣະພຸທ<u>ທ</u>ເຈົ້າຂ້າ" "<u>ພິ</u>ກສຸທັງຫລາຍ ພວກທ່ານບໍ່ມີຄວາມປະສົງຄ໌ຈະຂ້າບໍ່ຕ້ອງອາບັຕິ" (ເຣື້ອງທີ່໔໘)

ສມັຍນັ້ນ <u>ພິ</u>ກສຸຮູບນຶ່ງອາພາ<u>ທ</u> <u>ພິ</u>ກສຸທັງຫລາຍມີຄວາມປະສົງຄ໌ຈະຂ້າຈຶ່ງຊ່ອຍກັນໂຈມໃຫ້ທ່ານລຸກຂຶ້ນ ທ່ານເຖິງແກ່ມໍຣ<u>ນ</u><u>ພ</u>າພ <u>ພິ</u>ກສຸເຫລົ່ານັ້ນເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະ<u>ພ</u>າຄໃຫ້ຊົງຊາບພຣະອົງຄ໌ຕຣັສຖາມວ່າ "<u>ພິ</u>ກສຸທັງຫລາຍ ພວກທ່ານຄິດຢ່າງໃດ" "ພວກຂ້າພຣະພຸທ<u>ທ</u>ເຈົ້າມີຄວາມປະສົງຄ໌ຈະຂ້າ ພຣະພຸທ<u>ທ</u>ເຈົ້າຂ້າ" "<u>ພິ</u>ກສຸທັງຫລາຍ ພວກທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໔໙)

ສມັຍນັ້ນ <u>ພິ</u>ກສຸຮູບນຶ່ງອາພາ<u>ທ</u> <u>ພິ</u>ກສຸທັງຫລາຍມີຄວາມປະສົງຄ໌ຈະຂ້າຈຶ່ງຊ່ອຍກັນໂຈມໃຫ້ທ່ານລຸກຂຶ້ນ ແຕ່ທ່ານບໍ່ເຖິງແກ່ມໍຣ<u>ນ</u><u>ພ</u>າພ <u>ພິ</u>ກສຸເຫລົ່ານັ້ນເກີດຄວາມກັງວົລໃຈວ່າພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະ<u>ພ</u>າຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "<u>ພິ</u>ກສຸທັງຫລາຍ ພວກທ່ານຄິດຢ່າງໃດ" "ພວກຂ້າພຣະພຸທ<u>ທ</u>ເຈົ້າມີຄວາມປະສົງຄ໌ຈະຂ້າ ພຣະພຸທ<u>ທ</u>ເຈົ້າຂ້າ" "<u>ພິ</u>ກສຸທັງຫລາຍ ພວກທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ" (ເຣື້ອງທີ ໕໐)

## ເຣື້ອງເຮັດໃຫ້ລົ້ມ ໓ ເຣື້ອງ

ສມັຍນັ້ນ <u>ພິ</u>ກສຸຮູບນຶ່ງອາພາ<u>ທ</u> <u>ພິ</u>ກສຸທັງຫລາຍຈຶ່ງຊ່ອຍກັນເຮັດໃຫ້ທ່ານລົ້ມລົງ ທ່ານເຖິງແກ່ມໍຣ<u>ນ</u><u>ພ</u>າພ <u>ພິ</u>ກສຸເຫລົ່ານັ້ນເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະ<u>ພ</u>າຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "<u>ພິ</u>ກສຸທັງຫລາຍ ພວກທ່ານ

ຄິດຢ່າງໃດ" "ພວກຂ້າພຣະພຸທທູເຈົ້າບໍ່ມີຄວາມປະສົງຄ໌ຈະຂ້າພຣະພຸທທູເຈົ້າຂ້າ" "ພິກສຸທັງຫລາຍ ພວກທ່ານບໍ່ມີຄວາມປະສົງຄ໌ຈະຂ້າ ບໍ່ຕ້ອງອາບັຕິ" (ເຣື່ອງທີ ໕໑)

ສມັຍນັ້ນ ພິກສຸຮູບນຶ່ງອາພາທ ພິກສຸທັງຫລາຍມີຄວາມປະສົງຄ໌ຈະຂ້າ ຈຶ່ງຊ່ອຍກັນເຮັດໃຫ້ທ່ານລົ້ມລົງ ທ່ານເຖິງແກ່ມໍຣນພາພ ພິກສຸເຫລົ່ານັ້ນເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນໍາເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸທັງຫລາຍ ພວກທ່ານຄິດຢ່າງໃດ" "ພວກຂ້າພຣະພຸທທູເຈົ້າມີຄວາມປະສົງຄ໌ຈະຂ້າ ພຣະພຸທທູເຈົ້າຂ້າ" "ພິກສຸທັງຫລາຍ ພວກທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໕໒)

ສມັຍນັ້ນ ພິກສຸຮູບນຶ່ງອາພາທ ພິກສຸທັງຫລາຍມີຄວາມປະສົງຄ໌ຈະຂ້າ ຈຶ່ງຊ່ອຍກັນເຮັດໃຫ້ທ່ານລົ້ມລົງ ແຕ່ທ່ານບໍ່ເຖິງແກ່ມໍຣນພາພ ພິກສຸເຫລົ່ານັ້ນເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນໍາເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸທັງຫລາຍ ພວກທ່ານຄິດຢ່າງໃດ" "ພວກຂ້າພຣະພຸທທູເຈົ້າມີຄວາມປະສົງຄ໌ຈະຂ້າ ພຣະພຸທທູເຈົ້າຂ້າ" "ພິກສຸທັງຫລາຍ ພວກທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ" (ເຣື່ອງທີ ໕໓)

## ເຣື່ອງໃຫ້ຕາຍດ້ວຍເຂົ້າ ໓ ເຣື່ອງ

ສມັຍນັ້ນ ພິກສຸຮູບນຶ່ງອາພາທ ພິກສຸທັງຫລາຍຈຶ່ງຊ່ອຍກັນໃຫ້ທ່ານສັນເຂົ້າ ທ່ານເຖິງແກ່ມໍຣນພາພ ພິກສຸເຫລົ່ານັ້ນເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນໍາເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸທັງຫລາຍ ພວກທ່ານຄິດຢ່າງໃດ" "ພວກຂ້າພຣະພຸທທູເຈົ້າບໍ່ມີຄວາມປະສົງຄ໌ຈະຂ້າ ພຣະພຸທທູເຈົ້າຂ້າ" "ພິກສຸທັງຫລາຍ ພວກທ່ານບໍ່ມີຄວາມປະສົງຄ໌ຈະຂ້າ ບໍ່ຕ້ອງອາບັຕິ" (ເຣື່ອງທີ ໕໔)

ສມັຍນັ້ນ ພິກສຸຮູບນຶ່ງອາພາທ ພິກສຸທັງຫລາຍມີຄວາມປະສົງຄ໌ຈະຂ້າຈຶ່ງຊ່ອຍກັນໃຫ້ທ່ານສັນເຂົ້າ ທ່ານເຖິງແກ່ມໍຣນພາພ ພິກສຸເຫລົ່ານັ້ນເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນໍາເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸທັງຫລາຍ ພວກທ່ານຄິດຢ່າງໃດ" "ພວກຂ້າພຣະພຸທທູເຈົ້າມີຄວາມປະສົງຄ໌ຈະຂ້າ ພຣະພຸທທູເຈົ້າຂ້າ" "ພິກສຸທັງຫລາຍ ພວກທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໕໕)

ສມັຍນັ້ນ ພິກສຸຮູບນຶ່ງອາພາທ ພິກສຸທັງຫລາຍມີຄວາມປະສົງຄ໌ຈະຂ້າ ຈຶ່ງຊ່ອຍກັນໃຫ້ທ່ານສັນເຂົ້າ ແຕ່ທ່ານບໍ່ເຖິງແກ່ມໍຣນພາພ ພິກສຸເຫລົ່ານັ້ນເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸທັງຫລາຍ ພວກທ່ານຄິດຢ່າງໃດ" "ພວກຂ້າພຣະພຸທທເຈົ້າມີຄວາມປະສົງຄ໌ຈະຂ້າ ພຣະພຸທທເຈົ້າຂ້າ" "ພິກສຸທັງຫລາຍ ພວກທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ" (ເຣື້ອງທີ ໕໘)

## ເຣື້ອງໃຫ້ຕາຍດ້ວຍນ້ຳສັນ ໖ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງອາພາທ ພິກສຸທັງຫລາຍໃຫ້ທ່ານດື່ມນ້ຳ ທ່ານເຖິງແກ່ມໍຣນພາພ ພິກສຸເຫລົ່ານັ້ນເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸທັງຫລາຍພວກທ່ານຄິດຢ່າງໃດ" "ພວກຂ້າພຣະພຸທທເຈົ້າບໍ່ມີຄວາມປະສົງຄ໌ຈະຂ້າ ພຣະພຸທທເຈົ້າຂ້າ" "ພິກສຸທັງຫລາຍ ພວກທ່ານບໍ່ມີຄວາມປະສົງຄ໌ຈະຂ້າ ບໍ່ຕ້ອງອາບັຕິ" (ເຣື້ອງທີ ໕໙)

ສມັຍນັ້ນ ພິກສຸຮູບນຶ່ງອາພາທ ພິກສຸທັງຫລາຍມີຄວາມປະສົງຄ໌ຈະຂ້າ ຈຶ່ງໃຫ້ທ່ານດື່ມນ້ຳ ທ່ານເຖິງແກ່ມໍຣນພາພ ພິກສຸເຫລົ່ານັ້ນເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸທັງຫລາຍ ພວກທ່ານຄິດຢ່າງໃດ" "ພວກຂ້າພຣະພຸທທເຈົ້າມີຄວາມປະສົງຄ໌ຈະຂ້າ ພຣະພຸທທເຈົ້າຂ້າ" "ພິກສຸທັງຫລາຍ ພວກທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໕໙)

ສມັຍນັ້ນ ພິກສຸຮູບນຶ່ງອາພາທ ພິກສຸທັງຫລາຍມີຄວາມປະສົງຄ໌ຈະຂ້າ ຈຶ່ງໃຫ້ທ່ານດື່ມນ້ຳ ແຕ່ທ່ານບໍ່ເຖິງແກ່ມໍຣນພາພ ພິກສຸເຫລົ່ານັ້ນເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸທັງຫລາຍ ພວກທ່ານຄິດຢ່າງໃດ" "ພວກຂ້າພຣະພຸທທເຈົ້າມີຄວາມປະສົງຄ໌ຈະຂ້າ ພຣະພຸທທເຈົ້າຂ້າ" "ພິກສຸທັງຫລາຍ ພວກທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ" (ເຣື້ອງທີ ໕໙)

## ເຣື້ອງຍິງມີຄັນພ໌ກັບຊາຍຊູ້ ໑ ເຣື້ອງ

[໑໗໘] ສະໄໝນັ້ນ ຍິງຄົນນຶ່ງເປັນແມ່ຮ້າງ ໄດ້ມີຄັນພົກັບຊາຍຊູ້ ນາງບອກພິກສຸທີ່ນາງອຸປຖັມພ໌ວ່າ "ພຣະຄຸນເຈົ້າໂປດຫາຍາທາລຸລູກໃຫ້ດ້ອຍເຖີດ" ທ່ານຮັບຄໍາແລ້ວໄດ້ໃຫ້ຍາທາລຸລູກແກ່ຍິງນັ້ນ ທາຣົກເຖິງແກ່ຄວາມຕາຍ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັດປາຣາຊິກຫລືບໍ່ ຈຶ່ງນໍາເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັດປາຣາຊິກ" (ເຣື່ອງທີ ໘໐)

## ເຣື້ອງຍິງຮ່ວມສາມີ ໔ ເຣື່ອງ

ສະໄໝນັ້ນ ຊາຍຄົນນຶ່ງມີພັຣຍາ ໔ ຄົນ ຄົນນຶ່ງເປັນໝັນ ອີກຄົນນຶ່ງບໍ່ເປັນໝັນ ຍິງໝັນບອກພິກສຸທີ່ນາງອຸປຖັມພ໌ວ່າ "ຖ້ານາງຄົນນັ້ນຄອດບຸຕຣ ຈັກໄດ້ຄອບຄອງຊັພຍ໌ສົມບັຕທັງໝົດ ພຣະຄຸນເຈົ້າໂປດຫາຍາທາລຸລູກໃຫ້ດ້ອຍເຖີດ" ທ່ານຮັບຄໍາແລ້ວ ໄດ້ໃຫ້ຍາທາລຸລູກແກ່ຍິງທີ່ບໍ່ເປັນໝັນ ທາຣົກເຖິງແກ່ຄວາມຕາຍ ແຕ່ມາຣດາບໍ່ຕາຍ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັດປາຣາຊິກຫລືບໍ່ ຈຶ່ງນໍາເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັດປາຣາຊິກ" (ເຣື້ອງທີ ໘໑)

ສະໄໝນັ້ນ ຊາຍຄົນນຶ່ງມີພັຣຍາ ໔ ຄົນ ຄົນນຶ່ງເປັນໝັນ ອີກຄົນນຶ່ງບໍ່ເປັນໝັນ ຍິງໝັນບອກພິກສຸທີ່ນາງອຸປຖັມພ໌ວ່າ "ຖ້ານາງຄົນນັ້ນຄອດບຸຕຣຈັກໄດ້ຄອບຄອງຊັພຍ໌ສົມບັຕທັງໝົດ ພຣະຄຸນເຈົ້າໂປດຫາຍາທາລຸລູກໃຫ້ດ້ອຍເຖີດ" ພິກສຸນັ້ນຮັບຄໍາແລ້ວໄດ້ໃຫ້ຍາທາລຸລູກແກ່ຍິງທີ່ບໍ່ເປັນໝັນ ມາຣດາເຖິງແກ່ຄວາມຕາຍແຕ່ທາຣົກບໍ່ຕາຍ ພິກສຸນັ້ນເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັດປາຣາຊິກຫລືບໍ່ ຈຶ່ງນໍາເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັດປາຣາຊິກ ແຕ່ຕ້ອງອາບັດຖຸລລັຈຈັຍ" (ເຣື້ອງທີ ໘໔)

## ເຣື້ອງຂ້າມາຣດາແລະບຸຕຣທັງ ໔ ຄົນຕາຍ ໑ ເຣື້ອງ

ສະໄໝນັ້ນ ຊາຍຄົນນຶ່ງມີພັຣຍາ ໔ ຄົນ ຄົນນຶ່ງເປັນໝັນ ອີກຄົນນຶ່ງບໍ່ເປັນໝັນ ຍິງໝັນບອກພິກສຸທີ່ນາງອຸປຖັມພ໌ວ່າ "ຖ້ານາງຄົນນັ້ນຄອດບຸຕຣຈັກໄດ້ຄອບຄອງຊັພຍ໌ສົມບັຕທັງໝົດ ພຣະຄຸນເຈົ້າໂປດຫາຍາທາລຸລູກໃຫ້ດ້ອຍເຖີດ" ພິກສຸນັ້ນຮັບຄໍາແລ້ວໄດ້ໃຫ້ຍາທາລຸລູກແກ່ຍິງທີ່ບໍ່ເປັນໝັນ ມາຣດາແລະບຸຕຣເຖິງແກ່ຄວາມຕາຍທັງ ໔ ຄົນ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັດ

ປາຣາຊິກຫລືບໍ່ ຈຶ່ງນໍາເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໕໓)

## ເຣື້ອງຂ້າມາຣດາແລະບຸຕຣທັງ ໒ ຄົນບໍ່ຕາຍ ໑ ເຣື້ອງ

ສມັຍນັ້ນ ຊາຍຄົນນຶ່ງມີພັຣຍາ ໒ ຄົນ ຄົນນຶ່ງເປັນຫມັນ ອີກຄົນນຶ່ງບໍ່ເປັນຫມັນ ຍິງຫມັນບອກ ພິກສຸທີ່ນາງອຸປຖັມພ໌ວ່າ "ຖ້ານາງຄົນນັ້ນຄອດບຸຕຣຈັກໄດ້ຄອບຄອງຊັພຍ໌ສົມບັຕທັງຫມົດ ພຣະຄຸນ ເຈົ້າໂປດຫາຍາຫລຸລູກໃຫ້ດ້ອຍເຖີດ" ພິກສຸນັ້ນຮັບຄໍາແລ້ວໄດ້ໃຫ້ຍາຫລຸລູກແກ່ຍິງທີ່ບໍ່ເປັນຫມັນ ແຕ່ມາຣດາແລະບຸຕຣບໍ່ຕາຍ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນໍາ ເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິ ປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ" (ເຣື້ອງທີ ໕໔)

## ເຣື້ອງໃຫ້ຮີດ ໑ ເຣື້ອງ

[໑໗໗] ສມັຍນັ້ນ ຍິງມີຄັນພ໌ຄົນນຶ່ງບອກພິກສຸທີ່ນາງອຸປຖັມພ໌ວ່າ "ພຣະຄຸນເຈົ້າໂປດຫາຍາຫລຸລູກ ໃຫ້ດ້ອຍເຖີດ" ພິກສຸນັ້ນຕອບວ່າ "ນ້ອງຍິງ ທ່ານຈົ່ງຮີດ" ນາງຮີດຄັນພ໌ເຮັດໃຫ້ຫລຸລູກ ພິກສຸນັ້ນ ເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນໍາເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະ ພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໕໕)

## ເຣື້ອງນາບຄັນພ໌ໃຫ້ຮ້ອນ ໑ ເຣື້ອງ

ສມັຍນັ້ນ ຍິງມີຄັນພ໌ບອກພິກສຸທີ່ນາງອຸປຖັມພ໌ວ່າ "ພຣະຄຸນເຈົ້າໂປດຫາຍາຫລຸລູກໃຫ້ດ້ອຍເຖີດ" ພິກສຸນັ້ນຕອບວ່າ "ນ້ອງຍິງ ທ່ານຈົ່ງນາບຄັນພ໌ໃຫ້ຮ້ອນ" ນາງນາບຄັນພ໌ໃຫ້ຮ້ອນຈົນຫລຸລູກ ພິກສຸນັ້ນເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນໍາເຣື້ອງນີ້ໄປຂາບທູລພຣະຜູ້ ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໕໖)

## ເຣື້ອງຍິງຫມັນ ໑ ເຣື້ອງ

ສມັຍນັ້ນ ຍິງຫມັນຄົນນຶ່ງບອກພິກສຸທີ່ນາງອຸປຖັມພ໌ວ່າ "ພຣະຄຸນເຈົ້າໂປດຫາຢາທີ່ເຮັດໃຫ້ຂະ ນ້ອຍມີລູກໄດ້ດ້ອຍເຖີດ" ພິກສຸນັ້ນຮັບຄໍາແລ້ວໄດ້ໃຫ້ຢາແກ່ຍິງຫມັນນັ້ນ ນາງເຖິງແກ່ຄວາມຕາຍ

ພິກສຸນັ້ນເກີດກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິທຸກກຕ" (ເຣື້ອງທີ ຝ໗)

## ເຣື້ອງຍິງບໍ່ເປັນຫມັນ ໑ ເຣື້ອງ

ສມັຍນັ້ນ ຍິງບໍ່ເປັນຫມັນຄົນນຶ່ງບອກພິກສຸທີ່ນາງອຸປຖັມພ໌ວ່າ "ພຣະຄຸນເຈົ້າ ໄປດຫາຍາທີ່ເຮັດໃຫ້ຂະນ້ອຍ ຢຸດມີລູກດ້ອຍເຖີດ" ພິກສຸນັ້ນຮັບຄຳແລ້ວໄດ້ໃຫ້ຢາແກ່ຍິງລູກດົກນັ້ນ ນາງເຖິງແກ່ຄວາມຕາຍ ພິກສຸນັ້ນເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິທຸກກຕ" (ເຣື້ອງທີ ຝ໘)

## ເຣື້ອງຈີ້ ໑ ເຣື້ອງ

ສມັຍນັ້ນ ພວກພິກສຸສັພພັຄຄີຍ໌ໃຊ້ນິ້ວມືຈີ້ພິກສຸຮູບນຶ່ງໃນກຸ່ມພວກພິກສຸສັຕຕຣສວັຄຄີຍ໌ໃຫ້ຫົວ ທ່ານເມື່ອຍຫັນໃຈບໍ່ທັນເຖິງແກ່ມໍຣນພາພ ພິກສຸເຫລົ່ານັ້ນເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ພວກທ່ານບໍ່ຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ຝ໙)

## ເຣື້ອງເຕັງ ໑ ເຣື້ອງ

ສມັຍນັ້ນ ພວກພິກສຸສັຕຕຣສວັຄຄີຍ໌ຊ່ອຍກັນເຕັງພິກສຸຮູບນຶ່ງໃນກຸ່ມພວກພິກສຸສັພພັຄຄີຍ໌ຈົນເຖິງແກ່ມໍຣນພາພ ດ້ວຍຕັ້ງໃຈວ່າຈັກລົງໂທສ ພວກທ່ານເກີດຄວາມກັງວົລໃຈວ່າພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ພວກທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິປາຈິຕຕີຍ໌" ໑ (ເຣື້ອງທີ ໗໐)

## ເຣື້ອງຂ້າຍັກສ໌ ໑ ເຣື້ອງ

ສມັຍນັ້ນ ພິກສຸຫມໍຜີຮູບນຶ່ງຂ້າຍັກສ໌ຕາຍ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ" (ເຣື້ອງທີ ໗໑)

## ເຣື້ອງສົ່ງໄປສູ່ທີ່ມີສັຕວ໌ຮ້າຍແລະຍັກສ໌ຮ້າຍຂາດ ໔ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງສົ່ງພິກສຸອີກຮູບນຶ່ງໄປຍັງວິຫາຣມີຍັກສ໌ຮ້າຍຂາດ ພວກຍັກສ໌ຂ້າພິກສຸນັ້ນມໍຣນພາພ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ມີຄວາມປະສົງຄ໌ຈະຂ້າ ບໍ່ຕ້ອງອາບັຕິ" (ເຣື້ອງທີ ໗໔)

ສມັຍນັ້ນ ພິກສຸຮູບນຶ່ງມີຄວາມປະສົງຄ໌ຈະຂ້າ ສົ່ງພິກສຸອີກຮູບນຶ່ງໄປຍັງວິຫາຣມີຍັກສ໌ຮ້າຍຂາດ ພວກຍັກສ໌ຂ້າພິກສຸນັ້ນມໍຣນພາພ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໗໓)

ສມັຍນັ້ນ ພິກສຸຮູບນຶ່ງມີຄວາມປະສົງຄ໌ຈະຂ້າ ສົ່ງພິກສຸອີກຮູບນຶ່ງໄປຍັງວິຫາຣທີ່ມີຍັກສ໌ຮ້າຍຂາດ ພວກຍັກສ໌ບໍ່ຂ້າທ່ານ ພິກສຸນັ້ນເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທ່ານບໍ່ຕ້ອງປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ" (ເຣື້ອງທີ ໗໔)

ສມັຍນັ້ນ ພິກສຸຮູບນຶ່ງສົ່ງພິກສຸອີກຮູບນຶ່ງໄປສູ່ທີ່ກັນດາຣມີສັຕວ໌ຮ້າຍ ເຫລົ່າສັຕວ໌ຮ້າຍຂ້າທ່ານມໍຣນພາພ ພິກສຸນັ້ນເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ມີຄວາມປະສົງຄ໌ຈະຂ້າ ບໍ່ຕ້ອງອາບັຕິ" (ເຣື້ອງທີ ໗໕)

ສມັຍນັ້ນ ພິກສຸຮູບນຶ່ງມີຄວາມປະສົງຄ໌ຈະຂ້າ ສົ່ງພິກສຸອີກຮູບນຶ່ງໄປສູ່ທີ່ກັນດາຣມີສັຕວ໌ຮ້າຍ ເຫລົ່າສັຕວ໌ຮ້າຍຂ້າພິກສຸນັ້ນມໍຣນພາພ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໗໖)

ສມັຍນັ້ນ ພິກສຸຮູບນຶ່ງສົ່ງພິກສຸອີກຮູບນຶ່ງໄປຍັງທີ່ກັນດາຣມີສັຕວ໌ຮ້າຍ ເຫລົ່າສັຕວ໌ຮ້າຍບໍ່ຂ້າພິກສຸນັ້ນ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້

ມີພຣະພາຄໃຫ້ຊົງ ຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງປາຣາຊິກ ແຕ່ຕ້ອງອາບັຕິ ຖຸລລັຈຈັຍ" (ເຣື່ອງທີ ໆໆ)

ສມັຍນັ້ນ ພິກສຸຮູບນຶ່ງສັ່ງພິກສຸອີກຮູບນຶ່ງໄປສູ່ທີ່ກັນດານມີໂຈຣ ພວກໂຈຣຂ້າທ່ານນໍຣນພາພ ພິກສຸນັ້ນເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ມີຄວາມປະສົງຄ໌ຈະຂ້າ ບໍ່ຕ້ອງອາບັຕິ" (ເຣື່ອງທີ ໆ໘)

ສມັຍນັ້ນ ພິກສຸຮູບນຶ່ງມີຄວາມປະສົງຄ໌ຈະຂ້າ ສັ່ງພິກສຸອີກຮູບນຶ່ງໄປສູ່ທີ່ກັນດານມີໂຈຣ ພວກໂຈຣຂ້າພິກສຸນັ້ນນໍຣນພາພ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໆ໙)

ສມັຍນັ້ນ ພິກສຸຮູບນຶ່ງມີຄວາມປະສົງຄ໌ຈະຂ້າ ສັ່ງພິກສຸອີກຮູບນຶ່ງໄປສູ່ທີ່ກັນດານມີໂຈຣ ພວກໂຈຣບໍ່ຂ້າພິກສຸນັ້ນ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ" (ເຣື່ອງທີ ໆ໐)

## ເຣື່ອງສຳຄັນວ່າແມ່ນ ໔ ເຣື່ອງ

[໑໘໘] ສມັຍນັ້ນ ພິກສຸຮູບນຶ່ງມີຄວາມປະສົງຄ໌ຈະຂ້າພິກສຸທີ່ຈອງເວຣກັນ ສຳຄັນພິກສຸນັ້ນວ່າເປັນພິກສຸນັ້ນ ຈຶ່ງຂ້າພິກສຸນັ້ນ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໆ໑)

ສມັຍນັ້ນ ພິກສຸຮູບນຶ່ງມີຄວາມປະສົງຄ໌ຈະຂ້າພິກສຸທີ່ຈອງເວຣກັນ ສຳຄັນພິກສຸນັ້ນວ່າເປັນພິກສຸນັ້ນ ແຕ່ຂ້າພິກສຸອື່ນ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໆ໔)

ສມັຍນັ້ນ ພິກສຸຣູບນຶ່ງມີຄວາມປະສົງຄ໌ຈະຂ້າພິກສຸທີ່ຈອງເວຣກັນ ສຳຄັນພິກສຸທີ່ຈອງເວຣກັນວ່າ ເປັນພິກສຸອື່ນ ແຕ່ຂ້າພິກສຸຜູ້ຈອງເວຣນັ້ນ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໗໓)

ສມັຍນັ້ນ ພິກສຸຣູບນຶ່ງມີຄວາມປະສົງຄ໌ຈະຂ້າພິກສຸທີ່ຈອງເວຣກັນ ສຳຄັນພິກສຸທີ່ຈອງເວຣກັນວ່າ ເປັນພິກສຸອື່ນແລະໄດ້ຂ້າພິກສຸອື່ນ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໗໔)

## ເຣື້ອງປະຫາຣ ໓ ເຣື້ອງ

ສມັຍນັ້ນ ພິກສຸຣູບນຶ່ງຖືກຜີເຂົ້າ ພິກສຸອີກຣູບນຶ່ງທຸບຕີທ່ານຈົນເຖິງແກ່ມໍຣນພາພ ພິກສຸຣູບທີ່ທຸບຕີນັ້ນເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ມີຄວາມປະສົງຄ໌ຈະຂ້າ ບໍ່ຕ້ອງອາບັຕິ" (ເຣື້ອງທີ ໗໕)

ສມັຍນັ້ນ ພິກສຸຣູບນຶ່ງຖືກຜີເຂົ້າ ພິກສຸອີກຣູບນຶ່ງມີຄວາມປະສົງຄ໌ຈະຂ້າຈຶ່ງທຸບຕີທ່ານຈົນເຖິງແກ່ມໍຣນພາພ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໗໖)

ສມັຍນັ້ນ ພິກສຸຣູບນຶ່ງຖືກຜີເຂົ້າ ພິກສຸອີກຣູບນຶ່ງມີຄວາມປະສົງຄ໌ຈະຂ້າຈຶ່ງທຸບຕີທ່ານ ພິກສຸນັ້ນບໍ່ເຖິງແກ່ມໍຣນພາພ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ" (ເຣື້ອງທີ ໗໗)

## ເຣື້ອງພັນນາສວັນຄ໌ ໓ ເຣື້ອງ

ສມັຍນັ້ນ ພິກສຸຣູບນຶ່ງພັນນາເຣື້ອງສວັນຄ໌ໃຫ້ບຸຄຄົລຜູ້ທຳຄວາມດີຟັງ ເຂົານ້ອມໃຈເຊື່ອແລ້ວເຖິງແກ່ຄວາມຕາຍ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປ

ຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ມີຄວາມປະສົງຄ໌ຈະຂ້າ ບໍ່ຕ້ອງອາບັຕິ" (ເຣື່ອງທີ ໗໗)

ສມັຍນັ້ນ ພິກສຸຮູບນຶ່ງມີຄວາມປະສົງຄ໌ຈະຂ້າຈຶ່ງພັນນາເຣື່ອງສວັນຄ໌ໃຫ້ບຸຄຄົລຜູ້ທຳຄວາມດີຟັງ ເຂົານ້ອມໃຈເຊື່ອແລ້ວເຖິງແກ່ຄວາມຕາຍ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໗໙)

ສມັຍນັ້ນ ພິກສຸຮູບນຶ່ງມີຄວາມປະສົງຄ໌ຈະຂ້າ ຈຶ່ງພັນນາເຣື່ອງສວັນຄ໌ໃຫ້ບຸຄຄົລຜູ້ທຳຄວາມດີຟັງ ເຂົານ້ອມໃຈເຊື່ອແຕ່ບໍ່ຕາຍ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ" (ເຣື່ອງທີ ໘໐)

## ເຣື່ອງພັນນານຣົກ ໓ ເຣື່ອງ

ສມັຍນັ້ນ ພິກສຸຮູບນຶ່ງພັນນາເຣື່ອງນຣົກໃຫ້ຜູ້ຄວຣເກີດໃນນຣົກຟັງ ເຂົາຕົກໃຈເຖິງແກ່ຄວາມຕາຍ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ມີຄວາມປະສົງຄ໌ຈະຂ້າ ບໍ່ຕ້ອງອາບັຕິ" (ເຣື່ອງທີ ໘໑)

ສມັຍນັ້ນ ພິກສຸຮູບນຶ່ງມີຄວາມປະສົງຄ໌ຈະຂ້າຈຶ່ງພັນນາເຣື່ອງນຣົກໃຫ້ຜູ້ຄວຣເກີດໃນນຣົກຟັງ ເຂົາຕົກໃຈເຖິງແກ່ຄວາມຕາຍ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໘໒)

ສມັຍນັ້ນ ພິກສຸຮູບນຶ່ງມີຄວາມປະສົງຄ໌ຈະຂ້າຈຶ່ງພັນນາເຣື່ອງນຣົກໃຫ້ຜູ້ຄວຣເກີດໃນນຣົກຟັງ ເຂົາຕົກໃຈແຕ່ບໍ່ເຖິງຕາຍ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ" (ເຣື່ອງທີ ໘໓)

## ເຣື້ອງຕົ້ນໄມ້ທີ່ເມືອງອາຣູວີ ໓ ເຣື້ອງ

[໑໗໙] ສມັຍນັ້ນ ພວກພິກສຸຊາວເມືອງອາຣູວີຈະທຳການກໍ່ສ້າງຈຶ່ງຊ່ອຍກັນຕັດຕົ້ນໄມ້ ພິກສຸຮູບນຶ່ງບອກພິກສຸອີກຮູບນຶ່ງວ່າ "ທ່ານຈົ່ງຢືນຕັດຢູ່ບ່ອນນີ້" ພິກສຸຮູບນັ້ນ ຈຶ່ງຢືນຕັດທີ່ບ່ອນນັ້ນ ຕົ້ນໄມ້ລົ້ມທັບເຖິງແກ່ມໍຣນພາພ ພິກສຸຮູບທີ່ບອກເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທ່ານບໍ່ມີຄວາມປະສົງຄ໌ຈະຂ້າ ບໍ່ຕ້ອງອາບັຕິ" (ເຣື້ອງທີ ໘໔)

ສມັຍນັ້ນ ພວກພິກສຸຊາວເມືອງອາຣູວີຈະທຳການກໍ່ສ້າງ ຈຶ່ງຊ່ອຍກັນຕັດຕົ້ນໄມ້ ພິກສຸຮູບນຶ່ງມີຄວາມປະສົງຄ໌ຈະຂ້າຈຶ່ງບອກພິກສຸອີກຮູບນຶ່ງວ່າ "ທ່ານຈົ່ງຢືນຕັດຢູ່ບ່ອນນີ້" ຕົ້ນໄມ້ລົ້ມທັບທ່ານຜູ້ຢືນຕັດຢູ່ທີ່ນັ້ນເຖິງແກ່ມໍຣນພາພ ພິກສຸຮູບທີ່ບອກເກີດຄວາມກັງວົລໃຈວ່າເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໘໕)

ສມັຍນັ້ນ ພວກພິກສຸຊາວເມືອງອາຣູວີຈະທຳການກໍ່ສ້າງ ຈຶ່ງຊ່ອຍກັນຕັດຕົ້ນໄມ້ ພິກສຸຮູບນຶ່ງມີຄວາມປະສົງຄ໌ຈະຂ້າຈຶ່ງບອກພິກສຸອີກຮູບນຶ່ງວ່າ "ທ່ານຈົ່ງຢືນຕັດຢູ່ບ່ອນນີ້" ຕົ້ນໄມ້ລົ້ມທັບທ່ານຜູ້ຢືນຕັດຢູ່ທີ່ນັ້ນແຕ່ບໍ່ເຖິງມໍຣນພາພ ພິກສຸຮູບທີ່ບອກເກີດຄວາມກັງວົລໃຈວ່າເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ" (ເຣື້ອງທີ ໘໖)

## ເຣື້ອງເຜົາປ່າ ໓ ເຣື້ອງ

[໑໘໐] ສມັຍນັ້ນ ພວກພິກສຸສັພພັຄຄີຍ໌ເຜົາປ່າ ພວກຊາວບ້ານຖືກໄຟຄອກຕາຍ ພິກສຸເຫລົ່ານັ້ນເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ພວກທ່ານບໍ່ມີຄວາມປະສົງຄ໌ຈະຂ້າ ບໍ່ຕ້ອງອາບັຕິ" (ເຣື້ອງທີ ໘໗)

ສມັຍນັ້ນ ພວກພິກສຸສັພພັຄຄີຍ໌ມີຄວາມປະສົງຄ໌ຈະຂ້າ ຈຶ່ງເຜົາປ່າ ພວກຊາວບ້ານຖືກໄຟຄອກຕາຍ ພິກສຸເຫລົ່ານັ້ນເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປ

ຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ພວກທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໙໗)

ສມັຍນັ້ນ ພວກພິກສຸສັພພັຄຄີຍ໌ມີຄວາມປະສົງຄ໌ຈະຂ້າ ຈຶ່ງເຜົາປ່າ ພວກຊາວບ້ານຖືກໄຟຄອກແຕ່ບໍ່ຕາຍ ພິກສຸເຫລົ່ານັ້ນເກີດຄວາມກັງວົລໃຈວ່າ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ພວກທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ" (ເຣື້ອງທີ ໙໘)

## ເຣື້ອງບໍ່ໃຫ້ລຳບາກ ໑ ເຣື້ອງ

[໑໙໑] ສມັຍນັ້ນ ພິກສຸຣູບນຶ່ງໄປທີ່ທາງສີ່ແຍກ(ບ່ອນປະຫານນັກໂທດ) ບອກນາຍເພັຊຄາດວ່າ "ທ່ານຢ່າທໍຣມານນັກໂທສຄົນນີ້ເລີຍ ຈົ່ງປະຫາຣຊີວິຕດ້ວຍການຟັນຄັ້ງດຽວ" ເພັຊຄາດຮັບຄຳແລ້ວປະຫາຣຊີວິຕດ້ວຍການຟັນຄັ້ງດຽວ ພິກສຸນັ້ນເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງ ຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໑໐໐)

## ເຣື້ອງບໍ່ທຳຕາມທ່ານ ໑ ເຣື້ອງ

ສມັຍນັ້ນ ພິກສຸຣູປນຶ່ງໄປທີ່ທາງສີ່ແຍກ(ບ່ອນປະຫານນັກໂທດ) ບອກນາຍເພັຊຄາດວ່າ "ທ່ານຢ່າທໍຣມານນັກໂທສຄົນນີ້ເລີຍ ຈົ່ງປະຫາຣຊີວິຕດ້ວຍການຟັນຄັ້ງດຽວ" ເພັຊຄາດກ່າວວ່າ "ຂ້າພະເຈົ້າຈະບໍ່ທຳຕາມຄຳຂອງທ່ານ" ແລ້ວປະຫາຣຊີວິຕນັກໂທສນັ້ນ ພິກສຸນັ້ນເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິທຸກກຕ" (ເຣື້ອງທີ ໑໐໑)

## ເຣື້ອງໃຫ້ດື່ມປຽງ ໑ ເຣື້ອງ

[໑໙໔] ສມັຍນັ້ນ ບຸຣຸສມືຕີນກຸ້ນຄົນນຶ່ງ ພວກຫມູ່ຍາຕຊ່ວຍກັນເບິ່ງແຍງຢູ່ໃນເຮືອນ ພິກສຸຣູບນຶ່ງໄດ້ກ່າວກັບພວກຍາຕຂອງບຸຣຸສນັ້ນວ່າ "ທ່ານທັງຫລາຍ ພວກທ່ານຢາກໃຫ້ບຸຣຸສຄົນນີ້ຕາຍບໍ່" "ພວກເຮົາຢາກໃຫ້ເຂົາຕາຍ ຂນ້ອຍ" "ຖ້າເຊັ່ນນັ້ນ ຈົ່ງໃຫ້ເຂົາດື່ມປຽງ" ຫມູ່ຍາຕນັ້ນຈຶ່ງໃຫ້ບຸຣຸສນັ້ນດື່ມປຽງຈົນບຸຣຸສນັ້ນເຖິງແກ່ຄວາມຕາຍ ພິກສຸຣູບທີ່ບອກວິທີຂ້າເກີດຄວາມກັງວົລໃຈວ່າ ເຮົາ

ຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໑໐໔)

## ເຣື້ອງໃຫ້ດື່ມຢາໂລນໂສວີຣກະ ໑ ເຣື້ອງ

ສມັຍນັ້ນ ບຸຣຸສມີຕີນກຸ້ນຄົນນຶ່ງ ພວກຫມູ່ຍາຕຊ່ອຍກັນເບິ່ງແຍງຢູ່ໃນເຮືອນ ພິກສຸນີຮູບນຶ່ງໄດ້ກ່າວກັບຫມູ່ ຍາຕຂອງບຸຣຸສນັ້ນວ່າ "ທ່ານທັງຫລາຍ ພວກທ່ານຢາກໃຫ້ບຸຣຸສຄົນນີ້ຕາຍບໍ່" "ພວກເຮົາຢາກໃຫ້ເຂົາຕາຍ ຂນ້ອຍ" "ຖ້າເຊັ່ນນັ້ນ ຈົ່ງໃຫ້ເຂົາດື່ມຢາໂລນໂສວີຣກະ" ຫມູ່ຍາຕຈຶ່ງໃຫ້ບຸຣຸສນັ້ນດື່ມຢາໂລນໂສວີຣກະຈົນບຸຣຸສນັ້ນເຖິງແກ່ຄວາມຕາຍ ພິກສຸນີນັ້ນເກີດຄວາມກັງວົລໃຈຈຶ່ງລະເຣື້ອງນັ້ນໃຫ້ພິກສຸນີທັງຫລາຍຊາບ ພວກພິກສຸນີແຈ້ງເຣື້ອງນັ້ນໃຫ້ພິກສຸທັງຫລາຍຊາບ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ພິກສຸນີນັ້ນຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໑໐໕)

ປາຣາຊິກສິກຂາບົທທີ ໓ ຈົບ

## ພຣະວິນັຍປິດົກ ມຫາວິພັງຄ໌ [໑. ປາຣາຊິກກັນຫ໌] ປາຣາຊິກສິກຂາບົທທີ ໔
## ເຣື້ອງພິກສຸຊາວຝັ່ງແມ່ນ້ຳວັຄຄຸມຸທາ
## ປາຣາຊິກສິກຂາບົທທີ ໔
## ວ່າດ້ວຍການກ່າວອວດອຸຕຕຣິມນຸສສທັມ
## ເຣື້ອງພິກສຸຊາວຝັ່ງແມ່ນ້ຳວັຄຄຸມຸທາ

[໑໙໕] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ກູຕາຄາຣສາລາ ປ່າມຫາວັນ ເຂຕກຸງເວສາລີ ຄັ້ງນັ້ນ ພິກສຸຈຳນວນຫລາຍ ເປັນເພື່ອນເຄີຍເຫັນເຄີຍຄົບກັນມາ ຈຳພັນສາຢູ່ໃກ້ຝັ່ງແມ່ນ້ຳວັຄຄຸມຸທາ ຄາວນັ້ນ ວັຊຊີຊົນບົທເກີດເຂົ້າຍາກຫມາກແພງ ປະຊາຊົນມີຄວາມເປັນຢູ່ຍາກແຄ້ນ ໃຊ້ສລາກປັນສ່ວນຊື້ອາຫານ ລົ້ມຕາຍກັນກະດູກຂາວເກື່ອນ ຍາກທີ່ພຣະອຣິຍະຈະບິນທບາຕຍັງຊີພໄດ້ ພິກສຸເຫລົ່ານັ້ນໄດ້ມີຄວາມຄິດວ່າ "ບັດນີ້ ວັຊຊີຊົນບົທເກີດເຂົ້າຍາກຫມາກແພງ ປະຊາຊົນມີຄວາມເປັນຢູ່ຍາກແຄ້ນ ໃຊ້ສລາກປັນສ່ວນຊື້ອາຫານ ລົ້ມຕາຍກັນກະດູກຂາວເກື່ອນ ຍາກທີ່ພຣະອຣິຍະຈະບິນທບາຕຍັງຊີພໄດ້ ເຮັດຢ່າງໃດນໍ ພວກເຮົາຈຶ່ງຈະພ້ອມພຽງກັນ

ຮ່ວມໃຈກັນ ບໍ່ຜິດຖຽງກັນ ຢູ່ຈຳພັນສາຢ່າງຜາສຸກ ແລະບິນທບາຕບໍ່ລຳບາກ" ພິກສຸບາງພວກສ ເນີວ່າ "ທ່ານທັງຫລາຍ ຖ້າເຊັ່ນນັ້ນ ພວກເຮົາມາຊ່ວຍກັນທຳງານຂອງພວກຄຣືຫັສຖ໌ ເມື່ອຊ່ວຍ ທຳງານ ພວກເຂົາກໍຄົງຈະພໍໃຈຖວາຍບິນທບາຕແກ່ພວກເຮົາ ໂດຍວິທີນີ້ແຫລະ ພວກເຮົາກໍຈະ ພ້ອມພຽງກັນ ຮ່ວມໃຈກັນ ບໍ່ຜິດຖຽງກັນຢູ່ຈຳພັນສາຢ່າງຜາສຸກ ແລະບິນທບາຕບໍ່ລຳບາກ" ພິກສຸ ອີກພວກສເນີວ່າ "ຢ່າເລີຍ ທ່ານທັງຫລາຍ ເປັນຫຍັງພວກເຮົາຈະຕ້ອງໄປຊ່ວຍກັນທຳງານຂອງ ພວກຄຣືຫັສຖ໌ ຂໍໃຫ້ພວກເຮົາມາຊ່ວຍກັນທຳຫນ້າທີ່ທູຕນຳຂ່າວສາຣໃຫ້ພວກຄຣືຫັສຖ໌ຈະດີກວ່າ ເມື່ອເຮັດຢ່າງນີ້ ພວກ ຄຣືຫັສຖ໌ກໍຄົງຈະພໍໃຈຖວາຍບິນທບາຕແກ່ພວກເຮົາ ໂດຍວິທີນີ້ແຫລະ ພວກເຮົາກໍຈະພ້ອມພຽງກັນ ຮ່ວມໃຈກັນ ບໍ່ຜິດຖຽງກັນຢູ່ຈຳພັນສາຢ່າງຜາສຸກແລະບິນທບາຕບໍ່ ລຳບາກ" ພິກສຸອີກພວກສເນີວ່າ "ຢ່າເລີຍ ທ່ານທັງຫລາຍ ເປັນຫຍັງພວກເຮົາຈະຕ້ອງໄປຊ່ວຍກັນ ທຳງານຫລືທຳຫນ້າທີ່ທູຕນຳຂ່າວສາຣໃຫ້ພວກຄຣືຫັສຖ໌ ທາງທີ່ດີພວກເຮົາມາກ່າວອວດອຸຕຕຣິມ ນຸສສທັມຂອງກັນແລະກັນໃຫ້ພວກຄຣືຫັສຖ໌ຟັງວ່າ 'ພິກສຸຮູບພຸ້ນໄດ້ປຖົມຢານ ຮູບພຸ້ນໄດ້ທຸຕິຍ ຢານ ຮູບພຸ້ນໄດ້ຕຕິຍຢານ ຮູບພຸ້ນໄດ້ຈຕຸຕຖຢານ ຮູບພຸ້ນເປັນພຣະໂສດາບັນ ຮູບພຸ້ນເປັນພຣະ ສກທາຄາມີ ຮູບພຸ້ນເປັນພຣະອນາຄາມີ ຮູບພຸ້ນເປັນ ພຣະອຣຫັນຕ໌ ຮູບພຸ້ນໄດ້ວິຊຊາ ໓ ຮູບພຸ້ນ ໄດ້ອພິຍຍາ ໖' ເມື່ອເວົ້າຢ່າງນີ້ ພວກຄຣືຫັສຖ໌ກໍຄົງຈະພໍໃຈຖວາຍບິນທບາຕແກ່ພວກເຮົາ ໂດຍວິ ທີນີ້ພວກເຮົາຈະພ້ອມພຽງກັນ ຮ່ວມໃຈກັນ ບໍ່ຜິດຖຽງກັນ ຢູ່ຈຳພັນສາຢ່າງຜາສຸກແລະບິນທບາຕບໍ່ ລຳບາກ" ໃນທີ່ສຸດ ພິກສຸເຫລົ່ານັ້ນທັງຫມົດຕົກລົງ ກັນວ່າ "ທ່ານທັງຫລາຍ ວິທີທີ່ພວກເຮົາພາ ກັນກ່າວອວດອຸຕຕຣິມນຸສສທັມຂອງກັນແລະກັນໃຫ້ພວກຄຣືຫັສຖ໌ຟັງເປັນວິທີທີ່ດີກວ່າວິທີອື່ນ"

[໑໘໔] ຕໍ່ມາພິກສຸເຫລົ່ານັ້ນໄດ້ພາກັນກ່າວອວດອຸຕຕຣິມນຸສສທັມຂອງກັນແລະກັນໃຫ້ພວກຄຣື ຫັສຖ໌ຟັງວ່າ "ພິກສຸຮູບພຸ້ນໄດ້ປຖົມຢານ ຯລຯ ຮູບພຸ້ນໄດ້ຈຕຸຕຖຢານ ຮູບພຸ້ນເປັນພຣະໂສດາບັນ ຯລຯ ຮູບພຸ້ນໄດ້ອພິຍຍາ ໖" ຄັ້ງນັ້ນແລ ປະຊາຊົນກໍພາກັນຍິນດີວ່າ "ເປັນລາພຂອງພວກເຮົານໍ ພວກເຮົາໄດ້ດີແລ້ວນໍທີ່ມີພິກສຸທັງຫລາຍເຊັ່ນນີ້ມາຢູ່ຈຳພັນສາ ເພາະແຕ່ກ່ອນນີ້ພວກເຮົາບໍ່ມີພິກສຸ ທັງຫລາຍທີ່ມີຄຸນສົມບັຕ ເຫມືອນຢ່າງພິກສຸຜູ້ມີສີລມີກັລຍານທັມເຫລົ່ານີ້ມາຢູ່ຈຳພັນສາເລີຍ" ໂພຊນະ (ອາຫາຣ) ...ຂາທນີຍະ (ຂອງຂົບຄ້ຽວ) ...ສາຍນີຍະ (ຂອງລິ້ມ) ...ປານະ (ເຄື່ອງດື່ມ) ຊນິດທີ່ພວກເຂົາຈະຖວາຍແກ່ພິກສຸເຫລົ່ານັ້ນ ພວກເຂົາບໍ່ຮັບປະທານ ບໍ່ຂົບຄ້ຽວ ບໍ່ລິ້ມ ບໍ່ດື່ມ ດ້ວຍຕົນເອງ ທັງບໍ່ໃຫ້ແກ່ມາຣດາບິດາ ບຸຕຣ ພັຣຍາ ຄົນຮັບໃຊ້ ກັມກອນ ມິຕຣ ອມາຕຍ໌ ຍາຕ ສາໂລຫິຕ ພິກສຸເຫລົ່ານັ້ນ ຈຶ່ງເປັນຜູ້ມີນ້ຳມີນວລ ມີອິນທຣີຍ໌ຜ່ອງໃສ ມີໃບຫນ້າເອີບອິ່ມ ມີ

ຜິວພັນຜຸດຜ່ອງ ມີປະເພນີຢູ່ວ່າ ເມື່ອພິກສຸທັງຫລາຍອອກພັນສາແລ້ວຈະໄປເຂົ້າເຝົ້າພຣະຜູ້ມີພຣະພາຄ ຄັນພິກສຸເຫລົ່ານັ້ນຈຳພັນສາຄົບ ໓ ເດືອນແລ້ວຈຶ່ງເກັບເສນາສນະ ຖືບາຕຣແລະຈີວອນອອກເດີນທາງມຸ່ງໄປສູ່ກຸງເວສາລີ ຈາຣິກໄປໂດຍລຳດັບ ເຖິງກຸງເວສາລີ ຜ່ານປ່າມຫາວັນ ໄປເຖິງກູຕາຄາຣສາລາ ແລ້ວເຂົ້າເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຄັນເຖິງແລ້ວຈຶ່ງຖວາຍບັງຄົມ ແລ້ວນັ່ງລົງຢູ່ ນະ ທີ່ສົມຄວຣ

## ພິກສຸຕ່າງທິສມາເຂົ້າເຝົ້າ

ສມັຍນັ້ນ ພິກສຸທັງຫລາຍທີ່ຈຳພັນສາຢູ່ໃນທິສຕ່າງໆ ດູຈ່ອຍຜອມ ຊອມຊໍ່ອ ມີຜິວພັນໝອງເສົ້າຊີດ ເຫລືອງ ເສັ້ນເອັນຂຶ້ນເຕັມໄປໝົດ ສ່ວນພິກສຸຊາວຝັ່ງແມ່ນ້ຳວັຄຄຸມຸທາກັບມີນ້ຳມີນວລ ມີອິນທຣີຍ໌ຜ່ອງໃສ ມີໃບໜ້າເອີບອິ່ມ ມີຜິວພັນຜຸດຜ່ອງ ອີກຢ່າງນຶ່ງ ກາຣທີ່ພຣະຜູ້ມີພຣະພາຄພຸທທເຈົ້າທັງຫລາຍຊົງປາສັຍກັບພຣະອາຄັນຕຸກະທັງຫລາຍນັ້ນກໍເປັນພຸທທປະເພນີ ລຳດັບນັ້ນພຣະຜູ້ມີພຣະພາຄຕຣັສຖາມພວກພິກສຸຊາວຝັ່ງແມ່ນ້ຳວັຄຄຸມຸທາວ່າ "ພິກສຸທັງຫລາຍ ທ່ານທັງຫລາຍຍັງສະບາຍດີຫລື ຍັງພໍເປັນຢູ່ໄດ້ຫລື ພວກທ່ານເປັນຜູ້ພ້ອມພຽງກັນ ຮ່ວມໃຈກັນ ບໍ່ຜິດຖຽງກັນ ຢູ່ຈຳພັນສາເປັນຜາສຸກຫລື ແລະບິນທບາຕບໍ່ລຳບາກຫລື"
ພິກສຸເຫລົ່ານັ້ນຂາບທູລວ່າ "ຍັງສະບາຍດີພຣະພຸທທເຈົ້າຂ້າ ຍັງພໍເປັນຢູ່ໄດ້ພຣະພຸທທເຈົ້າຂ້າ ອີກຢ່າງນຶ່ງ ພວກຂ້າພຣະພຸທທເຈົ້າເປັນຜູ້ພ້ອມພຽງກັນ ຮ່ວມໃຈກັນ ບໍ່ຜິດຖຽງກັນ ຢູ່ຈຳພັນສາເປັນຜາສຸກ ແລະບິນທບາຕບໍ່ລຳບາກ ພຣະພຸທທເຈົ້າຂ້າ"

## ພຸທທປະເພນີ

ພຣະຕຖາຄົຕເຈົ້າທັງຫລາຍຊົງຊາບເອື້ອງ ຕຣັສຖາມກໍມີ ບໍ່ຕຣັສຖາມກໍມີ ຊົງຊາບກາລອັນຄວຣຕຣັສຖາມກໍມີ ບໍ່ຕຣັສຖາມກໍມີ ຕຣັສຖາມເອື້ອງທີ່ເປັນປໂຍດ ບໍ່ຕຣັສຖາມເອື້ອງທີ່ບໍ່ເປັນປໂຍດ ເພາະພຣະຕຖາຄົຕເຈົ້າທັງຫລາຍຊົງຂຈັດເອື້ອງທີ່ບໍ່ເປັນປໂຍດເສັຽດ້ວຍອຣິຍມັຄແລ້ວ ພຣະຜູ້ມີພຣະພາຄພຸທທເຈົ້າທັງຫລາຍ ສອບ ຖາມພິກສຸທັງຫລາຍດ້ວຍເຫຕຸ ໔ ປະກາຣ ຄື ຈະຊົງສະແດງທັມຢ່າງນຶ່ງ ຈະຊົງບັນຍັຕສິກຂາບົທແກ່ພຣະສາວົກຢ່າງນຶ່ງ ລຳດັບນັ້ນ ພຣະຜູ້ມີພຣະພາຄຈຶ່ງໄດ້ຕຣັສຖາມພິກສຸຊາວຝັ່ງແມ່ນ້ຳວັຄຄຸມຸທາວ່າ "ເຮັດຢ່າງໃດ ທ່ານທັງຫລາຍຈຶ່ງພ້ອມພຽງກັນ ຮ່ວມໃຈກັນ ບໍ່ຜິດຖຽງກັນ ຢູ່ຈຳພັນສາຜາສຸກແລະບິນທບາຕບໍ່ລຳບາກ" ລຳດັບນັ້ນ ພິກສຸເຫລົ່ານັ້ນຈຶ່ງໄດ້ຂາບທູລເອື້ອງນັ້ນໃຫ້ພຣະຜູ້ມີພຣະພາຄຊົງຊາບ ພຣະຜູ້ມີພຣະພາຄຕຣັສຖາມວ່າ "ພິກສຸທັງ

ຫລາຍ ພວກທ່ານມີຄຸນວິເສສນັ້ນແມ່ນແທ້ບໍ່" ພິກສຸເຫລົ່ານັ້ນຂາບທູລວ່າ "ບໍ່ມີແມ່ນແທ້ພຣະພຸທທເຈົ້າຂ້າ"

ຊົງຕໍາຫນິ

ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕໍາຫນິວ່າ "ໂມຄບຸຣຸສທັງຫລາຍ ການກະທໍາຂອງພວກທ່ານບໍ່ສົມຄວນ ບໍ່ຄ້ອຍຕາມ ບໍ່ເຫມາະສົມ ບໍ່ແມ່ນກິຈຂອງສມນະ ໃຊ້ບໍ່ໄດ້ ບໍ່ຄວນທໍາ ຈັ່ງໃດພວກທ່ານຈຶ່ງພາກັນກ່າວອວດອຸຕຕຣິມນຸສສທັມຂອງກັນແລະກັນໃຫ້ພວກຄຣືຫັສຖ໌ຟັງ ເພາະເຫັນແກ່ປາກແກ່ທ້ອງລະ ພວກທ່ານໃຊ້ມີດປາດເຖືອໄຄອັນຄົມ ປາດຄວັດທ້ອງຍັງດີກວ່າການກ່າວອວດອຸຕຕຣິມນຸສສທັມຂອງກັນແລະກັນໃຫ້ພວກຄຣືຫັສຖ໌ຟັງ ເພາະຫຍັງລະ ເພາະຜູ້ໃຊ້ມີດປາດເຖືອໄຄອັນຄົມ ປາດຄວັດຄວັດທ້ອງກໍຈະເພິງເຖິງຄວາມຕາຍຫລືທຸກຂ໌ປາງຕາຍເພາະການກະທໍານັ້ນເປັນເຫຕຸ ຫລັງຈາກຕາຍແລ້ວກໍບໍ່ຕ້ອງໄປບັງເກີດໃນອບາຍ ທຸຄຕິ ວິນິ ບາຕ ນຣົກ ສ່ວນຜູ້ກ່າວອວດອຸຕຣິມນຸສສທັມຂອງກັນແລະກັນໃຫ້ພວກຄຣືຫັສຖ໌ຟັງ ຫລັງຈາກຕາຍແລ້ວກໍຈະຕ້ອງໄປບັງເກີດໃນອບາຍ ທຸຄຕິ ວິນິບາຕ ນຣົກ ໂມຄບຸຣຸສທັງຫລາຍ ການເຮັດຢ່າງນີ້ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍທີ່ແມ່ນແທ້ກັບຈະເຮັດໃຫ້ຄົນທີ່ບໍ່ເຫລື້ອມໃສກໍບໍ່ເຫລື້ອມໃສໄປເລີຍ ຄົນທີ່ເຫລື້ອມໃສຢູ່ແລ້ວບາງພວກກໍຈະກາຍເປັນອື່ນໄປ" ຯລຯ ຄັນຊົງຕໍາຫນິແລ້ວ ໄດ້ຊົງກະທໍາທັມມີກຖາຕຣັສຮຽກພິກສຸທັງຫລາຍມາຮັບສັ່ງວ່າ

ມຫາໂຈຣ ໕ ຈໍາພວກ

[໑໗໕] ພິກສຸທັງຫລາຍ ມຫາໂຈຣ ໕ ຈໍາພວກນີ້ ມີປາກົດຢູ່ໃນໂລກ ຄື

໑. ມຫາໂຈຣບາງຄົນໃນໂລກນີ້ ປຣາຖນາວ່າ ເມື່ອໃດນໍ ເຮົາຈຶ່ງຈັກມີບໍຣິວານເປັນຮ້ອຍຫລືເປັນພັນຫ້ອມລ້ອມແລ້ວທ່ອງທຽວໄປໃນຄາມ ນິຄົມ ແລະຣາຊທານີ ທໍາການຂ້າເອງ ສັ່ງໃຫ້ຜູ້ອື່ນຂ້າຕັດ(ມືຕີນຜູ້ອື່ນ)ເອງ ສັ່ງໃຫ້ຜູ້ອື່ນຕັດ ເຜົາ(ບ້ານ)ເອງ ສັ່ງໃຫ້ຜູ້ອື່ນເຜົາ ຕໍ່ມາມຫາໂຈຣນັ້ນ ກໍໄດ້ມີບໍຣິວານເປັນຮ້ອຍຫລືເປັນພັນຫ້ອມລ້ອມແລ້ວທ່ອງທຽວໄປໃນຄາມ ນິຄົມແລະຣາຊທານີ ທໍາການຂ້າເອງ ສັ່ງໃຫ້ຜູ້ອື່ນຂ້າ ຕັດເອງ ສັ່ງໃຫ້ຜູ້ອື່ນຕັດ ເຜົາເອງ ສັ່ງໃຫ້ຜູ້ອື່ນເຜົາ ແນວໃດພິກສຸຊົ່ວບາງຮູບໃນທັມວິນັຍກໍແນວນັ້ນເຫມືອນກັນ ປຣາຖນາວ່າ ເມື່ອໃດນໍ ເຮົາຈັກມີພິກສຸບໍຣິວານເປັນຮ້ອຍຫລືເປັນພັນຫ້ອມລ້ອມແລ້ວທ່ອງທຽວໄປໃນຄາມ ນິຄົມ ແລະຣາຊທານີອັນຄຣື

ທັສຖ໌ແລະບັພຊິຕສັກກາຣະ ເຄົາຣົພ ນັບຖື ບູຊາ ນອບນ້ອມ ໄດ້ຈີວອນ ບິນທບາຕ ເສນາສນະ ແລະຄິລານປັຈຈັຍເພສັຊ ຕໍ່ມາ ພິກສຸນັ້ນກໍໄດ້ມີພິກສຸບໍຣິວາຣເປັນຮ້ອຍຫລືເປັນພັນຫ້ອມລ້ອມ ແລ້ວທ່ອງທຽວໄປໃນຄາມ ນິຄົມແລະຣາຊທານີ ອັນຄຣືຫັສຖ໌ແລະບັພຊິຕສັກກາຣະ ເຄົາຣົພ ນັບຖື ບູຊາ ຍຳເກງ ໄດ້ຈີວອນ ບິນທບາຕ ເສນາສນະແລະຄິລານປັຈຈັຍເພສັຊບໍຣິຂາຣ ພິກສຸທັງຫລາຍ ນີ້ຄືມຫາໂຈຣຈຳພວກທີ ໑ ທີ່ມີປາກົດຢູ່ໃນໂລກ

໒. ພິກສຸທັງຫລາຍ ຍັງມີພິກສຸຊົ່ວບາງຮູບໃນທັມວິນັຍນີ້ ຮ່ຳຮຽນທັມວິນັຍທີ່ຕຖາຄົຕປະກາດແລ້ວ ອວດອ້າງວ່າເປັນຂອງຕົນ ພິກສຸທັງຫລາຍ ນີ້ຄືມຫາໂຈຣຈຳພວກທີ ໒ ທີ່ມີປາກົດຢູ່ໃນໂລກ

໓. ພິກສຸທັງຫລາຍ ຍັງມີພິກສຸຊົ່ວບາງຮູບໃນທັມວິນັຍນີ້ ໂຈທເພື່ອນພິກສຸຜູ້ບໍຣິສຸດທ໌ ຜູ້ປະພຶດພຣົມຈັນຍ໌ອັນບໍຣິສຸດທ໌ດ້ວຍເຣື້ອງທີ່ທຳລາຍພຣົມຈັນຍ໌ອັນບໍ່ມີມູລ ພິກສຸທັງຫລາຍ ນີ້ຄືມຫາໂຈຣຈຳພວກທີ ໓

໔. ພິກສຸທັງຫລາຍ ຍັງມີພິກສຸຊົ່ວບາງຮູບໃນທັມວິນັຍນີ້ ສົງເຄາະປະຈົບຄຣືຫັສຖ໌ດ້ວຍຄຣຸພັນທ໌ ຂອງສົງຄ໌ຄືອາຣາມ ພື້ນທີ່ອາຣາມ ວິຫາຣ ພື້ນທີ່ວິຫາຣ ຕຽງ ຕັ່ງ ເສື່ອ ຫມອນ ຫມໍ້ ໂລຫະ ອ່າງໂລຫະ ກະຖາງໂລຫະ ກະທະໂລຫະ ມີດ ຂວານ ຜົ່ງ ຈອບ ສວ່ານ ເຄືອໄມ້ ໄມ້ໄຜ່ ຫຍ້າມຸງກະຕ່າຍ ຫຍ້າແຝກ ຫຍ້າສາມັນ ດິນຫນຽວ ເຄື່ອງໄມ້ ເຄື່ອງດິນ ພິກສຸທັງຫລາຍ ນີ້ຄືມຫາໂຈຣຈຳພວກທີ ໔

໕. ພິກສຸທັງຫລາຍ ພິກສຸຜູ້ກ່າວອວດອຸຕຕຣິມນຸສສທັມອັນບໍ່ມີຢູ່ ບໍ່ເປັນຈິງ ຈັດເປັນຍອດມຫາໂຈຣໃນໂລກພ້ອມທັງເທວໂລກ ມາຣໂລກ ພຣົມໂລກ ໃນຫມູ່ສັຕວ໌ພ້ອມທັງສມນະພຣາມນ໌ ເທວດາແລະມນຸສຍ໌ ຂໍ້ນັ້ນເພາະເຫຕຸໃດ ເພາະພິກສຸນັ້ນ ສັນອາຫາຣຂອງຊາວບ້ານດ້ວຍໄຖຍຈິຕ

## ນິຄົມຄາຖາ

ພິກສຸຜູ້ປະກາດຕົນຊຶ່ງມິພາວະເປັນຢ່າງນຶ່ງ ໃຫ້ຄົນເຂົ້າໃຈວ່າເປັນຢ່າງອື່ນ ສັນອາຫາຣດ້ວຍໄຖຍຈິຕເຫມືອນ ພານນົກລໍ້ຈັບນົກມາກິນສະນັ້ນ ພິກສຸຊົ່ວຈຳນວນຫລາຍມີຜ້າກາສາຍະພັນທີ່ຄໍ ມີທັມຊົ່ວຊາມ ບໍ່ສຳຣວມ ພວກທ່ານຍ່ອມຕົກນຣົກ ເພາະບາປກັມທັງຫລາຍທີ່ຊົ່ວຊາມ ພິກສຸທຸສີລບໍ່ສຳຣວມ ກິນກ້ອນເຫລັກທີ່ຮ້ອນເຫມືອນແປວໄຟຍັງດີກວ່າ ບໍຣິໂພຄອາຫາຣຂອງຊາວບ້ານ ບໍ່ດີເລີຍ

## ຊິງບັນຍັຕສິກຂາບົທ

ຄັນພຣະຜູ້ມີພຣະພາຄຊົງຕຳຫນິພວກພິກສຸຊາວຝັ່ງແມ່ນ້ຳວັຄຄຸມຸທາໂດຍປະການຕ່າງໆແລ້ວ ໄດ້ຕຣັສໂທສແຫ່ງຄວາມເປັນຄົນລ້ຽງຍາກບຳລຸງຍາກ ຯລຯ ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັຕ

[໑໙໘] ກໍ ພິກສຸໃດ ບໍ່ຮູ້ຍິ່ງ ກ່າວອວດອຸຕຣິມນຸສສທັມອັນເປັນຍານທັສສນະທີ່ປະເສີດອັນສາມາດໃຫ້ນ້ອມເຂົ້າມາໃນຕົນວ່າ "ຂ້າພະເຈົ້າຮູ້ຢ່າງນີ້ ເຫັນຢ່າງນີ້" ຄັນສມັຍຕໍ່ຈາກນັ້ນ ອັນຜູ້ໃດຜູ້ນຶ່ງໂຈທກໍຕາມບໍ່ໂຈທກໍຕາມ ທ່ານຜູ້ຕ້ອງອາບັຕິແລ້ວຫວັງຄວາມບໍຣິສຸດທ໌ ເພິ່ງກ່າວຢ່າງນີ້ວ່າ "ທ່ານທັງຫລາຍ ຂ້າພະເຈົ້າບໍ່ຮູ້ຢ່າງນັ້ນ ໄດ້ກ່າວວ່າຮູ້ ຂ້າພະເຈົ້າບໍ່ເຫັນຢ່າງນັ້ນ ໄດ້ກ່າວວ່າເຫັນ ຂ້າພະເຈົ້າກ່າວຄຳໄຮ້ປໂຍດ ເປັນຄຳເທັຈ" ແມ່ນພິກສຸນີ້ເປັນປາຣາຊິກ ຫາສັງວາສບໍ່ໄດ້ ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັຕໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື່ອງພິກສຸຊາວຝັ່ງແມ່ນນ້ຳວັຄຄຸມຸທາ ຈົບ

ເຣື່ອງພິກສຸສຳຄັນວ່າໄດ້ບັນລຸ

[໑໙໗] ສມັຍນັ້ນ ພິກສຸຈຳນວນຫລາຍ ເຂົ້າໃຈມັຄຜົລທີ່ຍັງບໍ່ໄດ້ເຫັນວ່າໄດ້ເຫັນ ບໍ່ໄດ້ເຖິງວ່າໄດ້ເຖິງ ບໍ່ໄດ້ບັນລຸວ່າໄດ້ບັນລຸ ບໍ່ໄດ້ເຮັດໃຫ້ແຈ້ງວ່າໄດ້ເຮັດໃຫ້ແຈ້ງ ພາກັນພຍາກອນມັຄຜົລດ້ວຍສຳຄັນວ່າໄດ້ບັນລຸ ຄັນຕໍ່ມາ ຈິຕຂອງພິກສຸເຫລົ່ານັ້ນເອນອຽງໄປທາງຄວາມກຳຫນັດແດ່ທາງຄວາມຂັດເຄືອງແດ່ ທາງຄວາມ ຫລົງແດ່ ເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ແຕ່ພວກເຮົາເຂົ້າໃຈ ມັຄ ຜົລທີ່ຍັງບໍ່ໄດ້ເຫັນວ່າໄດ້ເຫັນ ບໍ່ໄດ້ເຖິງວ່າໄດ້ເຖິງ ບໍ່ໄດ້ບັນລຸວ່າໄດ້ບັນລຸ ບໍ່ໄດ້ເຮັດໃຫ້ແຈ້ງວ່າໄດ້ເຮັດໃຫ້ແຈ້ງ ຈຶ່ງອວດອ້າງມັຄຜົລຕາມທີ່ສຳຄັນວ່າໄດ້ບັນລຸ ພວກເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງແຈ້ງເຣື່ອງນັ້ນໃຫ້ພຣະອານົນທ໌ຊາບ ພຣະອານົນທ໌ຈຶ່ງຂາບທູລເຣື່ອງນັ້ນໃຫ້ພຣະຜູ້ມີພຣະພາຄຊົງຊາບ ພຣະຜູ້ມີພຣະພາຄຕຣັສວ່າ "ມີຢູ່ເຫມືອນກັນ ອານົນທ໌ ທີ່ພິກສຸທັງຫລາຍເຂົ້າໃຈມັຄຜົລທີ່ຍັງບໍ່ໄດ້ເຫັນວ່າໄດ້ເຫັນ ບໍ່ໄດ້ເຖິງວ່າໄດ້ເຖິງ ບໍ່ໄດ້ບັນລຸວ່າໄດ້ບັນລຸ ບໍ່ໄດ້ເຮັດໃຫ້ແຈ້ງວ່າໄດ້ເຮັດໃຫ້ແຈ້ງ ຈຶ່ງອວດອ້າງມັຄຜົລຕາມທີ່ສຳຄັນວ່າໄດ້ບັນລຸ ແຕ່ກໍຣນີນີ້ບໍ່ຄວຣກ່າວວ່າມີ" ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື່ອງນີ້ເປັນຕົ້ນເຫຕຸ ແລ້ວຕຣັສຮຽກພິກສຸທັງຫລາຍ ຯລຯ ຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

## ພຣະອນຸບັນຍັຕ

ອີກຢ່າງນຶ່ງ ພິກສຸໃດບໍ່ຮູ້ຍິ່ງ ກ່າວອວດອຸຕຕຣິມນຸສສທັມອັນເປັນຍານທັສສນະທີ່ປະເສີດອັນສາມາດໃຫ້ນ້ອມເຂົ້າມາໃນຕົນວ່າ "ຂ້າພະເຈົ້າຮູ້ຢ່າງນີ້ ເຫັນຢ່າງນີ້" ຄັນສມັຍຕໍ່ຈາກນັ້ນ ອັນຜູ້ໃດຜູ້ນຶ່ງໂຈທກໍຕາມ ບໍ່ໂຈທກໍຕາມ ທ່ານຜູ້ຕ້ອງອາບັຕິແລ້ວຫວັງຄວາມບໍຣິສຸດທ໌ ເພິ່ງກ່າວຢ່າງນີ້ວ່າ "ທ່ານທັງຫລາຍ ຂ້າພະເຈົ້າບໍ່ຮູ້ຢ່າງນັ້ນ ໄດ້ກ່າວວ່າຮູ້ ຂ້າພະເຈົ້າບໍ່ເຫັນຢ່າງນັ້ນ ໄດ້ກ່າວວ່າເຫັນ ຂ້າພະເຈົ້າກ່າວຄຳໄຮ້ປໂຍດເປັນຄຳເທັຈ" ເວັ້ນໄວ້ແຕ່ສຳຄັນວ່າໄດ້ບັນລຸ ແມ່ນພິກສຸນີ້ກໍເປັນປາຣາຊິກຫາສັງວາສບໍ່ໄດ້

ເຣື້ອງພິກສຸສຳຄັນວ່າໄດ້ບັນລຸ ຈົບ

## ສິກຂາບົທວິພັງຄ໌

[໑໙໗] ຄຳວ່າ ອີກຢ່າງນຶ່ງ...ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ອີກຢ່າງນຶ່ງ...ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າ ພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະ ພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ຄຳວ່າ ບໍ່ຮູ້ຍິ່ງ ຄື ພິກສຸບໍ່ຮູ້ບໍ່ເຫັນກຸສົລທັມໃນຕົນຊຶ່ງບໍ່ມີຢູ່ ບໍ່ເປັນແມ່ນແທ້ຫາບໍ່ໄດ້ ກ່າວວ່າ ເຮົາມີກຸສົລທັມ

ທີ່ຊື່ວ່າ ອຸຕຕຣິມນຸສສທັມ ໄດ້ແກ່ ຍານ ວິໂມກຂ໌ ສມາທິ ສມາບັຕິ ຍານທັສສນະ ມັຄພາວນາ ການທຳຜົລໃຫ້ແຈ້ງ ການລະກິເລສ ພາວະທີ່ຈິຕປອດຈາກກິເລສ ຄວາມຍິນດີໃນເຮືອນວ່າງ

ຄຳວ່າ ນ້ອມເຂົ້າມາໃນຕົນ ໄດ້ແກ່ ນ້ອມກຸສົລທັມເຫລົ່ານັ້ນເຂົ້າໃນຕົນ ຫລືນ້ອມຕົນເຂົ້າໃນກຸສົລທັມເຫລົ່ານັ້ນ

ຄຳວ່າ ຍານະ ໄດ້ແກ່ ວິຊຊາ ໓

ຄຳວ່າ ທັສສນະ ໄດ້ແກ່ ຍານກໍຄືທັສສນະ ທັສສນະກໍຄືຍານ

ຄຳວ່າ ກ່າວອວດ ຄື ບອກແກ່ຊາຍຫລືແກ່ຍິງ ແກ່ບັພຊິຕຫລືແກ່ຄຣືຫັສຖ໌

ຄຳວ່າ ຂ້າພະເຈົ້າຮູ້ຢ່າງນີ້ ເຫັນຢ່າງນີ້ ຄວາມວ່າ "ຂ້າພະເຈົ້າຮູ້ທັມເຫລົ່ານັ້ນ ເຫັນທັມເຫລົ່ານັ້ນ

ຫຼັມເຫລົ່ານັ້ນມີຢູ່ໃນຂ້າພະເຈົ້າ ແລະຂ້າພະເຈົ້າຍ່ອມເຫັນແຈ້ງຫຼັມເຫລົ່ານັ້ນ"

ຄຳວ່າ ຄັນສມັຍຕໍ່ຈາກນັ້ນ ຄື ລ່ວງຂນະ ໄລຍະ ບຶດ ທີ່ກ່າວອອດນັ້ນ

ຄຳວ່າ ອັນຜູ້ໃດຜູ້ນຶ່ງໂຈທກໍຕາມ ຄື ມີຜູ້ໂຈທກ໌ໃນເຣື້ອງທີ່ທ່ານກ່າວອ້າງວ່າ "ທ່ານບັນລຸຫຍັງ ບັນລຸຢ່າງໃດ ບັນລຸເມື່ອໃດບັນລຸທີ່ໃດ ລະກິເລສເຫລົ່າໃດໄດ້ ໄດ້ຫຼັມຫຍັງ"

ຄຳວ່າ ບໍ່ໂຈທ ຄື ບໍ່ມີໃຜ ໆ ກ່າວ

ຄຳວ່າ ຜູ້ຕ້ອງອາບັຕິແລ້ວ ຄວາມວ່າ ພິກສຸມີຄວາມປຣາຖນາຊົ່ວ ຖືກຄວາມຢາກຄອບງຳ ກ່າວອອດອຸຕຕຣິ ມນຸສສຫຼັມທີ່ບໍ່ມີຈິງບໍ່ເປັນແມ່ນແທ້ ຕ້ອງອາບັຕິປາຣາຊິກແລ້ວ

ຄຳວ່າ ຫວັງຄວາມບໍຣິສຸດທ໌ ຄື ປະສົງຄ໌ຈະເປັນຄຣືຫັສຖ໌ ອຸບາສິກ ອາຣາມິກ (ຄົນວັດ) ຫລື ສາມເນນ

ຄຳວ່າ ທ່ານທັງຫລາຍ ຂ້າພະເຈົ້າບໍ່ຮູ້ຢ່າງນັ້ນ ໄດ້ກ່າວວ່າຮູ້ ຂ້າພະເຈົ້າບໍ່ເຫັນຢ່າງນັ້ນ ໄດ້ກ່າວວ່າເຫັນ ຄວາມວ່າ ພິກສຸກ່າວວ່າ "ຂ້າພະເຈົ້າບໍ່ຮູ້ຫຼັມເຫລົ່ານັ້ນ ບໍ່ເຫັນຫຼັມເຫລົ່ານັ້ນ ຫຼັມເຫລົ່ານັ້ນບໍ່ມີ ແລະຂ້າພະເຈົ້າກໍບໍ່ເຫັນແຈ້ງຫຼັມເຫລົ່ານັ້ນ"

ຄຳວ່າ ກ່າວຄຳໄຮ້ປໂຍດ ເປັນຄຳເທັຈ ຄວາມວ່າ ຂ້າພະເຈົ້າກ່າວຄຳໄຮ້ປໂຍດ ກ່າວເທັຈ ກ່າວບໍ່ແມ່ນແທ້ກ່າວ ສິ່ງທີ່ບໍ່ມີ ຂ້າພະເຈົ້າບໍ່ຮູ້ກ່າວໄປແລ້ວ

ຄຳວ່າ ເວັ້ນໄວ້ແຕ່ສຳຄັນວ່າໄດ້ບັນລຸ ຄື ຍົກເວັ້ນການສຳຄັນວ່າໄດ້ບັນລຸ

ຄຳວ່າ ແມ່ນພິກສຸນີ້ ຄື ພິກສຸທີ່ພຣະຜູ້ມີພຣະພາຄຕຣັສທຽບກັບພິກສຸຮູບກ່ອນ ໆ

ຄຳວ່າ ເປັນປາຣາຊິກ ຄວາມວ່າ ພິກສຸມີຄວາມປຣາຖນາຊົ່ວ ຖືກຄວາມຢາກຄອບງຳ ກ່າວອອດອຸຕຕຣິມນຸສ ສຫຼັມທີ່ບໍ່ມີຢູ່ບໍ່ເປັນແມ່ນແທ້ຍ່ອມບໍ່ເປັນສມນະບໍ່ເປັນເຊື້ອສາຍສກຍບຸຕຣ ປຽບເຫມືອນຕົ້ນຕາລຍອດກຸ້ນທີ່ບໍ່ອາຈງອກໄດ້ຕໍ່ໄປ ດັ່ງນັ້ນ ພຣະຜູ້ມີພຣະພາຄຈຶ່ງຕຣັສວ່າ "ເປັນປາຣາຊິກ"

ຄຳວ່າ ຫາສັງວາສບໍ່ໄດ້ ອທິບາຍວ່າ ທີ່ຊື່ວ່າ ສັງວາສ ໄດ້ແກ່ກັມທີ່ທຳຮ່ວມກັນ ອຸທເທສທີ່ສວດຮ່ວມກັນ ຄວາມມີສິກຂາສເມີກັນ ນີ້ຊື່ວ່າ ສັງວາສ ສັງວາສນັ້ນບໍ່ມີກັບພິກສຸຮູບນັ້ນ ດ້ວຍເຫຕຸນັ້ນ ພຣະຜູ້ມີພຣະພາຄຈຶ່ງຕຣັສວ່າ "ຫາສັງວາສບໍ່ໄດ້"

## ບົທພາຊນີຍ໌

[໑໙໙] ທີ່ຊື່ວ່າ ອຸຕຕຣິມນຸສສຫຼັມ ໄດ້ແກ່ ຢານ ວິໂມກຂ໌ ສມາທິ ສມາບັຕິ ຢານທັສສນະ ມັຄພາວນາ ການທຳຜົລໃຫ້ແຈ້ງ ການລະກິເລສ ພາວະທີ່ຈິຕປອດຈາກກິເລສ ຄວາມຍິນດີໃນເຮືອນວ່າງ

ຄຳວ່າ ຍານ ໄດ້ແກ່ ປຖົມຍານ ທຸຕິຍຍານ ຕຕິຍຍານ ຈຕຸຕຖຍານ
ຄຳວ່າ ວິໂມກຂ໌ ໄດ້ແກ່ ສຸຍຍຕວິໂມກຂ໌ ອນິມິຕຕວິໂມກຂ໌ ອັປປນິຫິຕວິໂມກຂ໌
ຄຳວ່າ ສມາທິ ໄດ້ແກ່ ສຸຍຍຕສມາທິ ອນິມິຕຕສມາທິ ອັປປນິຫິຕສມາທິ
ຄຳວ່າ ສມາບັຕິ ໄດ້ແກ່ ສຸຍຍຕສມາບັຕິ ອນິມິຕຕສມາບັຕິ ອັປປນິຫິຕສມາບັຕິ
ຄຳວ່າ ຍານະ ໄດ້ແກ່ ວິຊຊາ ໓
ຄຳວ່າ ມັຄພາວນາ ໄດ້ແກ່ ສຕິປັຕຖານ ໔ ສັມມັປປທານ ໔ ອິທທິບາທ ໔ ອິນທຣິຍ໌ ໕ ພລະ ໕ ໂພຊຍງຄ໌ ໗ ອຣິຍມັຄມີອົງຄ໌ ໘
ຄຳວ່າ ກາຣທຳຜົລໃຫ້ແຈ້ງ ໄດ້ແກ່ ກາຣທຳໂສດາປັຕຕິຜລໃຫ້ແຈ້ງ ກາຣທຳສກທາຄາມິຜົລໃຫ້ແຈ້ງ ກາຣທຳອນາຄາມິຜົລໃຫ້ແຈ້ງ ກາຣທຳອຣຫັຕຕຜົລໃຫ້ແຈ້ງ
ຄຳວ່າ ກາຣລະກິເລສ ໄດ້ແກ່ ກາຣລະຣາຄະ ກາຣລະໂທສະ ກາຣລະໂມຫະ
ຄຳວ່າ ພາວະທີ່ຈິຕປອດຈາກກິເລສ ໄດ້ແກ່ ພາວະທີ່ຈິຕປອດຈາກຣາຄະ ພາວະທີ່ຈິຕປອດຈາກໂທສະ ພາວະທີ່ຈິຕປອດຈາກໂມຫະ
ຄຳວ່າ ຄວາມຍິນດີໃນເຮືອນວ່າງ ໄດ້ແກ່ ຄວາມຍິນດີໃນເຮືອນວ່າງດ້ວຍປຖົມຍານ ຄວາມຍິນດີໃນເຮືອນວ່າງດ້ວຍທຸຕິຍຍານ ຄວາມຍິນດີໃນເຮືອນວ່າງດ້ວຍຕຕິຍຍານ ຄວາມຍິນດີໃນເຮືອນວ່າງດ້ວຍຈຕຸຕຖຍານ

## ສຸທທິກວາຣກຖາ

## ສຸທທິກຍານ

## ປຖົມຍານ

[໔໐໐] ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າເຂົ້າປຖົມຍານແລ້ວ" ດ້ວຍອາກາຣ ໓ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າ ຈັກກ່າວເທັຈ (໒) ກຳລັງກ່າວ ກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວ ກໍຮູ້ວ່າກ່າວເທັຈແລ້ວ ຕ້ອງອາບັຕິປາຣາຊິກ

ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າເຂົ້າປຖົມຍານແລ້ວ" ດ້ວຍອາກາຣ ໔ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າ ຈັກກ່າວເທັຈ (໒) ກຳລັງກ່າວ ກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວ ກໍຮູ້ວ່າກ່າວເທັຈແລ້ວ (໔) ອຳພາງຄວາມເຫັນ ຕ້ອງອາບັຕິປາຣາຊິກ

ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າເຂົ້າປຖົມຢານແລ້ວ" ດ້ວຍອາການ ໕ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າ ຈັກກ່າວເທັຈ (໒) ກໍາລັງກ່າວ ກໍຮູ້ວ່າກໍາລັງກ່າວເທັຈ (໓) ຄັນກ່າວແລ້ວ ກໍຮູ້ວ່າກ່າວເທັຈແລ້ວ (໔) ອໍາພາງຄວາມເຫັນ (໕) ອໍາພາງຄວາມເຫັນຊອບ ຕ້ອງອາບັຕິປາຣາຊິກ

ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າເຂົ້າປຖົມຢານແລ້ວ" ດ້ວຍອາການ ໖ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າ ຈັກກ່າວເທັຈ (໒) ກໍາລັງກ່າວ ກໍຮູ້ວ່າກໍາລັງກ່າວເທັຈ (໓) ຄັນກ່າວແລ້ວ ກໍຮູ້ວ່າກ່າວເທັຈແລ້ວ (໔) ອໍາພາງຄວາມເຫັນ (໕) ອໍາພາງຄວາມເຫັນຊອບ (໖) ອໍາພາງຄວາມພໍໃຈ ຕ້ອງອາບັຕິປາຣາຊິກ

ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າເຂົ້າປຖົມຢານແລ້ວ" ດ້ວຍອາການ ໗ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າ ຈັກກ່າວເທັຈ (໒) ກໍາລັງກ່າວ ກໍຮູ້ວ່າກໍາລັງກ່າວເທັຈ (໓) ຄັນກ່າວແລ້ວ ກໍຮູ້ວ່າກ່າວເທັຈແລ້ວ (໔) ອໍາພາງຄວາມເຫັນ (໕) ອໍາພາງຄວາມເຫັນຊອບ (໖) ອໍາພາງຄວາມພໍໃຈ (໗) ອໍາພາງຄວາມປະສົງຄ໌ ຕ້ອງອາບັຕິປາຣາຊິກ

[໔໐໑] ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າເຂົ້າປຖົມຢານຢູ່" ດ້ວຍອາການ ໓ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າ ຈັກກ່າວເທັຈ (໒) ກໍາລັງກ່າວ ກໍຮູ້ວ່າກໍາລັງກ່າວເທັຈ (໓) ຄັນກ່າວແລ້ວ ກໍຮູ້ວ່າກ່າວເທັຈແລ້ວ ຕ້ອງອາບັຕິປາຣາຊິກ

ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າເຂົ້າປຖົມຢານຢູ່" ດ້ວຍອາການ ໔ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າ ຈັກກ່າວເທັຈ (໒) ກໍາລັງກ່າວ ກໍຮູ້ວ່າກໍາລັງກ່າວເທັຈ (໓) ຄັນກ່າວແລ້ວ ກໍຮູ້ວ່າກ່າວເທັຈແລ້ວ (໔) ອໍາພາງຄວາມເຫັນ ຕ້ອງອາບັຕິປາຣາຊິກ

ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າເຂົ້າປຖົມຢານຢູ່" ດ້ວຍອາການ ໕ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າ ຈັກກ່າວເທັຈ (໒) ກໍາລັງກ່າວ ກໍຮູ້ວ່າກໍາລັງກ່າວເທັຈ (໓) ຄັນກ່າວແລ້ວ ກໍຮູ້ວ່າກ່າວເທັຈແລ້ວ (໔) ອໍາພາງຄວາມເຫັນ (໕) ອໍາພາງຄວາມເຫັນຊອບ ຕ້ອງອາບັຕິປາຣາຊິກ

ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າເຂົ້າປຖົມຢານຢູ່" ດ້ວຍອາການ ໖ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າ ຈັກກ່າວເທັຈ (໒) ກໍາລັງກ່າວ ກໍຮູ້ວ່າກໍາລັງກ່າວເທັຈ (໓) ຄັນກ່າວແລ້ວ ກໍຮູ້ວ່າກ່າວ

ເທັ່ຈແລ້ວ (໔) ອຳພາງຄວາມເຫັນ (໕) ອຳພາງຄວາມເຫັນຊອບ (໖) ອຳພາງຄວາມພໍໃຈ ຕ້ອງອາບັຕິປາຣາຊິກ

ພິກສຸກ່າວເທັ່ຈທັ້ງທີ່ຮູ້ວ່າ "ຂ້າພະເຈົ້າເຂົ້າປຖົມຢານຢູ່" ດ້ວຍອາການ ໗ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າ ຈັກກ່າວເທັ່ຈ (໒) ກຳລັງກ່າວ ກໍຮູ້ວ່າກຳລັງກ່າວເທັ່ຈ (໓) ຄັນກ່າວແລ້ວ ກໍຮູ້ວ່າກ່າວເທັ່ຈແລ້ວ (໔) ອຳພາງຄວາມເຫັນ (໕) ອຳພາງຄວາມເຫັນຊອບ (໖) ອຳພາງຄວາມພໍໃຈ (໗) ອຳພາງຄວາມປະສົງຄ໌ ຕ້ອງອາບັຕິປາຣາຊິກ

[໔໐໒] ພິກສຸກ່າວເທັ່ຈທັ້ງທີ່ຮູ້ວ່າ "ຂ້າພະເຈົ້າເປັນຜູ້ເຂົ້າປຖົມຢານແລ້ວ" ດ້ວຍອາການ ໓ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າ ຈັກກ່າວເທັ່ຈ (໒) ກຳລັງກ່າວ ກໍຮູ້ວ່າກຳລັງກ່າວເທັ່ຈ (໓) ຄັນກ່າວແລ້ວ ກໍຮູ້ວ່າກ່າວເທັ່ຈແລ້ວ ຕ້ອງອາບັຕິປາຣາຊິກ

ພິກສຸກ່າວເທັ່ຈທັ້ງທີ່ຮູ້ວ່າ "ຂ້າພະເຈົ້າເປັນຜູ້ເຂົ້າປຖົມຢານແລ້ວ" ດ້ວຍອາການ ໔ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າ ຈັກກ່າວເທັ່ຈ (໒) ກຳລັງກ່າວ ກໍຮູ້ວ່າກຳລັງກ່າວເທັ່ຈ (໓) ຄັນກ່າວແລ້ວ ກໍຮູ້ວ່າກ່າວເທັ່ຈແລ້ວ (໔) ອຳພາງຄວາມເຫັນ ຕ້ອງອາບັຕິປາຣາຊິກ

ພິກສຸກ່າວເທັ່ຈທັ້ງທີ່ຮູ້ວ່າ "ຂ້າພະເຈົ້າເປັນຜູ້ເຂົ້າປຖົມຢານແລ້ວ" ດ້ວຍອາການ ໕ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າ ຈັກກ່າວເທັ່ຈ (໒) ກຳລັງກ່າວ ກໍຮູ້ວ່າກຳລັງກ່າວເທັ່ຈ (໓) ຄັນກ່າວແລ້ວ ກໍຮູ້ວ່າກ່າວເທັ່ຈແລ້ວ (໔) ອຳພາງຄວາມເຫັນ (໕) ອຳພາງຄວາມເຫັນຊອບ ຕ້ອງອາບັຕິປາຣາຊິກ

ພິກສຸກ່າວເທັ່ຈທັ້ງທີ່ຮູ້ວ່າ "ຂ້າພະເຈົ້າເປັນຜູ້ເຂົ້າປຖົມຢານແລ້ວ" ດ້ວຍອາການ ໖ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າ ຈັກກ່າວເທັ່ຈ (໒) ກຳລັງກ່າວ ກໍຮູ້ວ່າກຳລັງກ່າວເທັ່ຈ (໓) ຄັນກ່າວແລ້ວ ກໍຮູ້ວ່າກ່າວເທັ່ຈແລ້ວ (໔) ອຳພາງຄວາມເຫັນ (໕) ອຳພາງຄວາມເຫັນຊອບ (໖) ອຳພາງຄວາມພໍໃຈ ຕ້ອງອາບັຕິປາຣາຊິກ

ພິກສຸກ່າວເທັ່ຈທັ້ງທີ່ຮູ້ວ່າ "ຂ້າພະເຈົ້າເປັນຜູ້ເຂົ້າປຖົມຢານແລ້ວ" ດ້ວຍອາການ ໗ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າ ຈັກກ່າວເທັ່ຈ (໒) ກຳລັງກ່າວ ກໍຮູ້ວ່າກຳລັງກ່າວເທັ່ຈ (໓) ຄັນກ່າວແລ້ວ ກໍຮູ້ວ່າກ່າວເທັ່ຈແລ້ວ (໔) ອຳພາງຄວາມເຫັນ (໕) ອຳພາງຄວາມເຫັນຊອບ (໖) ອຳພາງຄວາມພໍໃຈ (໗) ອຳພາງຄວາມປະສົງຄ໌ ຕ້ອງອາບັຕິປາຣາຊິກ

[໔໐໓] ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າເປັນຜູ້ໄດ້ປະຖົມຍານ" ດ້ວຍອາການ ໓ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າ ຈັກກ່າວເທັຈ (໒) ກຳລັງກ່າວ ກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວ ກໍຮູ້ວ່າກ່າວເທັຈແລ້ວ ຕ້ອງອາບັຕິປາຣາຊິກ

ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າເປັນຜູ້ໄດ້ປະຖົມຍານ" ດ້ວຍອາການ ໔ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າ ຈັກກ່າວເທັຈ (໒) ກຳລັງກ່າວ ກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວ ກໍຮູ້ວ່າກ່າວເທັຈແລ້ວ (໔) ອຳພາງຄວາມເຫັນ ຕ້ອງອາບັຕິປາຣາຊິກ

ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າເປັນຜູ້ໄດ້ປະຖົມຍານ" ດ້ວຍອາການ ໕ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າ ຈັກກ່າວເທັຈ (໒) ກຳລັງກ່າວ ກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວ ກໍຮູ້ວ່າກ່າວເທັຈແລ້ວ (໔) ອຳພາງຄວາມເຫັນ (໕) ອຳພາງຄວາມເຫັນຊອບ ຕ້ອງອາບັຕິປາຣາຊິກ

ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າເປັນຜູ້ໄດ້ປະຖົມຍານ" ດ້ວຍອາການ ໖ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າ ຈັກກ່າວເທັຈ (໒) ກຳລັງກ່າວ ກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວ ກໍຮູ້ວ່າກ່າວເທັຈແລ້ວ (໔) ອຳພາງຄວາມເຫັນ (໕) ອຳພາງຄວາມເຫັນຊອບ (໖) ອຳພາງຄວາມພໍໃຈ ຕ້ອງອາບັຕິປາຣາຊິກ

ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າເປັນຜູ້ໄດ້ປະຖົມຍານ" ດ້ວຍອາການ ໗ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າ ຈັກກ່າວເທັຈ (໒) ກຳລັງກ່າວ ກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວ ກໍຮູ້ວ່າກ່າວເທັຈແລ້ວ (໔) ອຳພາງຄວາມເຫັນ (໕) ອຳພາງຄວາມເຫັນຊອບ (໖) ອຳພາງຄວາມພໍໃຈ (໗) ອຳພາງຄວາມປະສົງຄ໌ ຕ້ອງອາບັຕິປາຣາຊິກ

[໔໐໔] ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າເປັນຜູ້ຊຳນານໃນປະຖົມຍານ" ດ້ວຍອາການ ໓ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າ ຈັກກ່າວເທັຈ (໒) ກຳລັງກ່າວ ກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວ ກໍຮູ້ວ່າກ່າວເທັຈແລ້ວ ຕ້ອງອາບັຕິປາຣາຊິກ

ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າເປັນຜູ້ຊຳນານໃນປະຖົມຍານ" ດ້ວຍອາການ ໔ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າ ຈັກກ່າວເທັຈ (໒) ກຳລັງກ່າວ ກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວ ກໍຮູ້ວ່າກ່າວເທັຈແລ້ວ (໔) ອຳພາງຄວາມເຫັນ ຕ້ອງອາບັຕິປາຣາຊິກ

ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າເປັນຜູ້ຊຳນານໃນປຖົມຢານ" ດ້ວຍອາການ ໕ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າ ຈັກກ່າວເທັຈ (໒) ກຳລັງກ່າວ ກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວ ກໍຮູ້ວ່າກ່າວເທັຈແລ້ວ (໔) ອຳພາງຄວາມເຫັນ (໕) ອຳພາງຄວາມເຫັນຊອບ ຕ້ອງອາບັຕິປາຣາຊິກ

ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າເປັນຜູ້ຊຳນານໃນປຖົມຢານ" ດ້ວຍອາການ ໖ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າ ຈັກກ່າວເທັຈ (໒) ກຳລັງກ່າວ ກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວ ກໍຮູ້ວ່າກ່າວເທັຈແລ້ວ (໔) ອຳພາງຄວາມເຫັນ (໕) ອຳພາງຄວາມເຫັນຊອບ (໖) ອຳພາງຄວາມພໍໃຈ ຕ້ອງອາບັຕິປາຣາຊິກ

ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າເປັນຜູ້ຊຳນານໃນປຖົມຢານ" ດ້ວຍອາການ ໗ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າ ຈັກກ່າວເທັຈ (໒) ກຳລັງກ່າວ ກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວ ກໍຮູ້ວ່າກ່າວເທັຈແລ້ວ (໔) ອຳພາງຄວາມເຫັນ (໕) ອຳພາງຄວາມເຫັນຊອບ (໖) ອຳພາງຄວາມພໍໃຈ (໗) ອຳພາງຄວາມປະສົງຄ໌ ຕ້ອງອາບັຕິປາຣາຊິກ

[໒໐໕] ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າທຳປຖົມຢານໃຫ້ແຈ້ງແລ້ວ" ດ້ວຍອາການ ໓ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າ ຈັກກ່າວເທັຈ (໒) ກຳລັງກ່າວ ກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວ ກໍຮູ້ວ່າກ່າວເທັຈແລ້ວ ຕ້ອງອາບັຕິປາຣາຊິກ

ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າທຳປຖົມຢານໃຫ້ແຈ້ງແລ້ວ" ດ້ວຍອາການ ໔ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າ ຈັກກ່າວເທັຈ (໒) ກຳລັງກ່າວ ກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວ ກໍຮູ້ວ່າກ່າວເທັຈແລ້ວ (໔) ອຳພາງຄວາມເຫັນ ຕ້ອງອາບັຕິປາຣາຊິກ

ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າທຳປຖົມຢານໃຫ້ແຈ້ງແລ້ວ" ດ້ວຍອາການ ໕ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າ ຈັກກ່າວເທັຈ (໒) ກຳລັງກ່າວ ກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນ ກ່າວແລ້ວ ກໍຮູ້ວ່າກ່າວເທັຈແລ້ວ (໔) ອຳພາງຄວາມເຫັນ (໕) ອຳພາງຄວາມເຫັນຊອບ ຕ້ອງອາບັຕິປາຣາຊິກ

ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າທຳປຖົມຢານໃຫ້ແຈ້ງແລ້ວ" ດ້ວຍອາການ ໖ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າ ຈັກກ່າວເທັຈ (໒) ກຳລັງກ່າວ ກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວ ກໍຮູ້ວ່າກ່າວເທັຈແລ້ວ (໔) ອຳພາງຄວາມເຫັນ (໕) ອຳພາງຄວາມເຫັນຊອບ (໖) ອຳພາງຄວາມພໍໃຈ ຕ້ອງອາບັຕິປາຣາຊິກ

ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າທຳປຖົມຍານໃຫ້ແຈ້ງແລ້ວ" ດ້ວຍອາການ ໗ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າ ຈັກກ່າວເທັຈ (໒) ກຳລັງກ່າວ ກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວ ກໍຮູ້ວ່າກ່າວເທັຈແລ້ວ (໔) ອຳພາງຄວາມເຫັນ (໕) ອຳພາງຄວາມເຫັນຊອບ (໖) ອຳພາງຄວາມພໍໃຈ (໗) ອຳພາງຄວາມປະສົງຄ໌ ຕ້ອງອາບັຕິປາຣາຊິກ

[ປຖົມຍານນີ້ນັກປຣາຊຍ໌ໃຫ້ພິສດາຣແລ້ວ ແນວໃດ ແມ່ນຍານທັງມວລກໍເພິງໃຫ້ພິສດາຣແນວນັ້ນ]

## ທຸຕິຍຍານ ຕຕິຍຍານແລະຈຕຸຕຖຍານ

[໑໐໖] ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າເຂົ້າທຸຕິຍຍານແລ້ວ" ດ້ວຍອາການ ໓ ຢ່າງ ຯລຯ ຂ້າພະເຈົ້າເຂົ້າຕຕິຍຍານ ຯລຯ ຈຕຸຕຖຍານແລ້ວ ...ຂ້າພະເຈົ້າເຂົ້າຢູ່ ... ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ ...ຂ້າພະເຈົ້າເປັນຜູ້ໄດ້ຈຕຸຕຖຍານ ...ຂ້າພະເຈົ້າເປັນຜູ້ຊຳນານ ...ຂ້າພະເຈົ້າທຳຈຕຸຕຖຍານໃຫ້ແຈ້ງແລ້ວ ດ້ວຍອາການ ໗ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າ ຈັກກ່າວເທັຈ (໒) ກຳລັງກ່າວ ກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວ ກໍຮູ້ວ່າກ່າວເທັຈແລ້ວ (໔) ອຳພາງຄວາມເຫັນ (໕) ອຳພາງຄວາມເຫັນຊອບ (໖) ອຳພາງຄວາມພໍໃຈ (໗) ອຳພາງຄວາມປະສົງຄ໌ ຕ້ອງອາບັຕິປາຣາຊິກ

ພຣະວິນັຍປິດົກ ມຫາວິພັງຄ໌ [໑. ປາຣາຊິກກັນຫ໌] ປາຣາຊິກສິກຂາບົທທີ ໔ ບົທພາຊນີຍ໌

## ສຸທທິກອິໂມກຂ໌
## ສຸຍຍຕວິໂມກຂ໌ ອນິມິຕຕວິໂມກຂ໌ແລະອັປປນິຫິຕວິໂມກຂ໌

[໑໐໗] ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າເຂົ້າສຸຍຍຕວິໂມກຂ໌ແລ້ວ" ດ້ວຍອາການ ໓ ຢ່າງ ຯລຯ ຂ້າພະເຈົ້າເຂົ້າອນິມິຕຕວິໂມກຂ໌ ຯລຯ ອັປປນິຫິຕວິໂມກຂ໌ແລ້ວ ...ຂ້າພະເຈົ້າເຂົ້າຢູ່ ...ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ ...ຂ້າພະເຈົ້າເປັນຜູ້ໄດ້ອັປປນິຫິຕວິໂມກຂ໌ ...ຂ້າພະເຈົ້າເປັນຜູ້ຊຳນານ ...ຂ້າພະເຈົ້າທຳອັປປນິຫິຕວິໂມກຂ໌ໃຫ້ແຈ້ງແລ້ວ ...ຕ້ອງອາບັຕິປາຣາຊິກ ຯລຯ

## ສຸທທິກສມາທິ

ສຸຍຍຕສມາທິ ອນິມິຕຕສມາທິແລະອັປປນິຫິຕສມາທິ

ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າເຂົ້າສຸຍຍຕສມາທິແລ້ວ" ດ້ວຍອາການ ໓ ຢ່າງ ຯລຯ ຂ້າພະເຈົ້າເຂົ້າອນິມິຕຕສມາທິ ຯລຯ ອັປປນິຫິຕສມາທິແລ້ວ ...ຂ້າພະເຈົ້າເຂົ້າຢູ່ ...ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ ...ຂ້າພະເຈົ້າເປັນຜູ້ໄດ້ອັປປນິຫິຕສມາທິ ...ຂ້າພະເຈົ້າເປັນຜູ້ຊຳນານ ...ຂ້າພະເຈົ້າທຳອັປປນິຫິຕສມາທິໃຫ້ແຈ້ງແລ້ວ ...ຕ້ອງອາບັຕິປາຣາຊິກ ຯລຯ

## ສຸທທິກສມາບັຕິ

ສຸຍຍຕສມາບັຕິ ອນິມິຕຕສມາບັຕິແລະອັປປນິຫິຕສມາບັຕິ

ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າເຂົ້າສຸຍຍຕສມາບັຕິແລ້ວ" ດ້ວຍອາການ ໓ ຢ່າງ ຯລຯ ຂ້າພະເຈົ້າເຂົ້າອນິມິຕຕສມາບັຕິ ຯລຯ ອັປປນິຫິຕສມາບັຕິແລ້ວ ...ຂ້າພະເຈົ້າເຂົ້າຢູ່ ...ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ ...ຂ້າພະເຈົ້າເປັນຜູ້ໄດ້ອັປປນິຫິຕສມາບັຕິ ...ຂ້າພະເຈົ້າເປັນຜູ້ຊຳນານ ...ຂ້າພະເຈົ້າທຳອັປປນິຫິຕສມາບັຕິໃຫ້ແຈ້ງແລ້ວ ...ຕ້ອງອາບັຕິປາຣາຊິກ ຯລຯ

## ສຸທທິກຍານທັສສນະ
## ວິຊຊາ ໓

ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າເຂົ້າວິຊຊາ ໓ ແລ້ວ" ດ້ວຍອາການ ໓ ຢ່າງ ...ຂ້າພະເຈົ້າເຂົ້າຢູ່ ...ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ ...ຂ້າພະເຈົ້າເປັນຜູ້ໄດ້ວິຊຊາ ໓ ...ຂ້າພະເຈົ້າເປັນຜູ້ຊຳນານ ...ຂ້າພະເຈົ້າທຳວິຊຊາ ໓ ໃຫ້ແຈ້ງແລ້ວ ...ຕ້ອງອາບັຕິປາຣາຊິກ ຯລຯ

ພຣະວິນັຍປິດົກ ມຫາວິພັງຄ໌ [໑. ປາຣາຊິກກັນທ໌] ປາຣາຊິກສິກຂາບົທທີ ໔ ບົທພາຊນີຍ໌

## ສຸທທິກມັຄຄພາວນາ
## ສຕິປັຕຖານ ໔ ສັມມັປປທານ ໔ ແລະອິທທິບາທ ໔

ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າເຂົ້າສຕິປັຕຖານ ໔ ແລ້ວ" ດ້ວຍອາການ ໓ ຢ່າງ ຯລຯ ຂ້າພະເຈົ້າເຂົ້າສັມມັປປທານ ໔ ຯລຯ ອິທທິບາທ ໔ ແລ້ວ ...ຂ້າພະເຈົ້າເຂົ້າຢູ່ ...ຂ້າພະເຈົ້າເປັນຜູ້ເຂົ້າ

ແລ້ວ ...ຂ້າພະເຈົ້າເປັນຜູ້ໄດ້ອິທທິບາທ ໔ ...ຂ້າພະເຈົ້າເປັນຜູ້ຊຳນານ ...ຂ້າພະເຈົ້າທຳອິທທິບາທ ໔ ໃຫ້ແຈ້ງແລ້ວ ...ຕ້ອງອາບັຕິປາຣາຊິກ ຯລຯ

## ອິນທຣີຍ໌ ໕ ແລະພລະ ໕

ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າເຂົ້າອິນທຣີຍ໌ ໕ ແລ້ວ" ດ້ວຍອາການ ໓ ຢ່າງ ຯລຯ ຂ້າພະເຈົ້າເຂົ້າພລະ ໕ ແລ້ວ ...ຂ້າພະເຈົ້າເຂົ້າຢູ່ ...ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ ...ຂ້າພະເຈົ້າເປັນຜູ້ໄດ້ພລະ ໕ ...ຂ້າພະເຈົ້າເປັນຜູ້ຊຳນານ ...ຂ້າພະເຈົ້າທຳພລະ ໕ ໃຫ້ແຈ້ງແລ້ວ ...ຕ້ອງອາບັຕິປາຣາຊິກ ຯລຯ

## ໂພຊຊົງຄ໌ ໗

ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າເຂົ້າໂພຊຊົງຄ໌ ໗ ແລ້ວ" ດ້ວຍອາການ ໓ ຢ່າງ ...ຂ້າພະເຈົ້າເຂົ້າຢູ່ ...ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ ...ຂ້າພະເຈົ້າເປັນຜູ້ໄດ້ໂພຊຊົງຄ໌ ໗ ...ຂ້າພະເຈົ້າເປັນຜູ້ຊຳນານ ...ຂ້າພະເຈົ້າທຳໂພຊຊົງຄ໌ ໗ ໃຫ້ແຈ້ງແລ້ວ ...ຕ້ອງອາບັຕິປາຣາຊິກ ຯລຯ

## ອຣິຍມັຄມີອົງຄ໌ ໘

ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າເຂົ້າອຣິຍມັຄມີອົງຄ໌ ໘ ແລ້ວ" ດ້ວຍອາການ ໓ ຢ່າງ ...ຂ້າພະເຈົ້າເຂົ້າຢູ່ ...ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ ...ຂ້າພະເຈົ້າເປັນຜູ້ໄດ້ອຣິຍມັຄມີອົງຄ໌ ໘ ...ຂ້າພະເຈົ້າເປັນຜູ້ຊຳນານ ...ຂ້າພະເຈົ້າທຳອຣິຍມັຄມີອົງຄ໌ ໘ ໃຫ້ແຈ້ງແລ້ວ ...ຕ້ອງອາບັຕິປາຣາຊິກ ຯລຯ

## ພຣະວິນັຍປິດົກ ມຫາວິພັງຄ໌ [໑. ປາຣາຊິກກັນທ໌] ປາຣາຊິກສິກຂາບົທທີ ໔ ບົທພາຊນີຍ໌ ສຸທທິກອຣິຍຜົລ ໂສດາປັຕຕິຜົລ ສກທາຄາມີຜົລ ອນາຄາມີຜົລ ແລະອຣຫັຕຕຜົລ

ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າເຂົ້າໂສດາປັຕຕິຜົລແລ້ວ" ດ້ວຍອາການ ໓ ຢ່າງ ຯລຯ ຂ້າພະເຈົ້າເຂົ້າສກທາຄາມີຜົລ ຯລຯ ອນາຄາມີຜົລ ຯລຯ ອຣຫັຕຕຜົລແລ້ວ ...ຂ້າພະເຈົ້າເຂົ້າຢູ່ ...ຂ້າ

ພະເຈົ້າເປັນຜູ້ເຂົ້າແລ້ວ ...ຂ້າພະເຈົ້າເປັນຜູ້ໄດ້ອຣຫັຕຕຜົລ ...ຂ້າພະເຈົ້າເປັນຜູ້ຊໍານານ ...ຂ້າພະເຈົ້າທໍາອຣຫັຕຕຜົລໃຫ້ແຈ້ງແລ້ວ ...ຕ້ອງອາບັຕິປາຣາຊິກ ຯລຯ

### ສຸທຸທິກກິເລສປຫານ

### ສລະຣາຄະ

ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າສລະຣາຄະແລ້ວ ຂ້າພະເຈົ້າຄາຍຣາຄະແລ້ວ ຂ້າພະເຈົ້າພົ້ນຣາຄະແລ້ວ ຂ້າພະເຈົ້າລະຣາຄະແລ້ວ ຂ້າພະເຈົ້າສລັດຣາຄະແລ້ວ ຂ້າພະເຈົ້າເພີກຣາຄະແລ້ວ ຂ້າພະເຈົ້າຖອນຣາຄະຂຶ້ນແລ້ວ" ດ້ວຍອາການ ໓ ຢ່າງ ຄື ...ຕ້ອງອາບັຕິປາຣາຊິກ ຯລຯ

### ສລະໂທສະ

ພິກສຸກ່າວເທັຈທັງທີ່ຮູ້ວ່າ ຂ້າພະເຈົ້າສລະໂທສະແລ້ວ ຯລຯ ຖອນໂທສະຂຶ້ນແລ້ວ ດ້ວຍອາການ ໓ ຢ່າງ ຄື ...ຕ້ອງອາບັຕິປາຣາຊິກ ຯລຯ

### ສລະໂມຫະ

ພິກສຸກ່າວເທັຈທັງທີ່ຮູ້ວ່າ ຂ້າພະເຈົ້າສລະ ຄາຍ ພົ້ນ ລະ ສລັດ ເພີກ ຖອນໂມຫະຂຶ້ນແລ້ວ ດ້ວຍອາການ ໓ ຢ່າງ ຄື ...ຕ້ອງອາບັຕິປາຣາຊິກ ຯລຯ

### ສຸທຸທິກຈິຕຕວິນີວຣນະ

### ຈິຕປອດຈາກຣາຄະ ໂທສະແລະໂມຫະ

ພິກສຸກ່າວເທັຈທັງທີ່ຮູ້ວ່າ ຈິຕຂອງຂ້າພະເຈົ້າປອດຈາກຣາຄະ ດ້ວຍອາການ ໓ ຢ່າງ ຄື ...ຕ້ອງອາບັຕິປາຣາຊິກ ຯລຯ

ພິກສຸກ່າວເທັຈທັງທີ່ຮູ້ວ່າ ຈິຕຂອງຂ້າພະເຈົ້າປອດຈາກໂທສະ ດ້ວຍອາການ ໓ ຢ່າງ ຄື ...ຕ້ອງອາບັຕິປາຣາຊິກ ຯລຯ

ພິກສຸກ່າວເທັຈທັງທີ່ຮູ້ວ່າ ຈິຕຂອງຂ້າພະເຈົ້າປອດຈາກໂມຫະ ດ້ວຍອາການ ໓ ຢ່າງ ຯລຯ ດ້ວຍອາການ ໗ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າ ຈັກກ່າວເທັຈ (໔) ກໍາລັງກ່າວ ກໍຮູ້ວ່າກໍາລັງກ່າວ

ເທັຈ (໓) ຄັນກ່າວແລ້ວ ກໍຮູ້ວ່າກ່າວເທັຈແລ້ວ (໔) ອຳພາງຄວາມເຫັນ (໕) ອຳພາງຄວາມເຫັນຊອບ (໖) ອຳພາງຄວາມພໍໃຈ (໗) ອຳພາງຄວາມປະສົງຄ໌ ຕ້ອງອາບັຕິປາຣາຊິກ

ສຸທຫິກະ ຈົບ

ຂັນທູຈັກຣ

ປຖົມຢານແລະທຸຕິຍຢານ

[໔໐໗] ພິກສຸກ່າວເທັຈທັງທີ່ຮູ້ວ່າ ຂ້າພະເຈົ້າເຂົ້າປຖົມຢານແລະທຸຕິຍຢານແລ້ວ ດ້ວຍອາການ ໓ ຢ່າງ ...ຂ້າພະເຈົ້າເຂົ້າຢູ່ ...ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ ...ຂ້າພະເຈົ້າເປັນຜູ້ໄດ້ປຖົມຢານແລະທຸຕິຍຢານ ...ຂ້າພະເຈົ້າເປັນຜູ້ຊຳນານ ...ຂ້າພະເຈົ້າທຳປຖົມຢານແລະທຸຕິຍຢານໃຫ້ແຈ້ງແລ້ວ ...ຕ້ອງອາບັຕິປາຣາຊິກ ຯລຯ

ປຖົມຢານແລະຕຕິຍຢານ

ພິກສຸກ່າວເທັຈທັງທີ່ຮູ້ວ່າ ຂ້າພະເຈົ້າເຂົ້າປຖົມຢານແລະຕຕິຍຢານແລ້ວ ດ້ວຍອາການ ໓ ຢ່າງ ...ຂ້າພະເຈົ້າເຂົ້າຢູ່ ...ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ ...ຂ້າພະເຈົ້າເປັນຜູ້ໄດ້ປຖົມຢານແລະຕຕິຍຢານ ...ຂ້າພະເຈົ້າເປັນຜູ້ຊຳນານ ...ຂ້າພະເຈົ້າທຳປຖົມຢານແລະຕຕິຍຢານໃຫ້ແຈ້ງແລ້ວ ...ຕ້ອງອາບັຕິປາຣາຊິກ ຯລຯ ປຖົມຢານແລະຈຕຸຕຖຢານ

ພິກສຸກ່າວເທັຈທັງທີ່ຮູ້ວ່າ ຂ້າພະເຈົ້າເຂົ້າປຖົມຢານແລະຈຕຸຕຖຢານແລ້ວ ດ້ວຍອາການ ໓ ຢ່າງ ...ຂ້າພະເຈົ້າເຂົ້າຢູ່ ...ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ ...ຂ້າພະເຈົ້າເປັນຜູ້ໄດ້ປຖົມຢານແລະຈຕຸຕຖຢານ ...ຂ້າພະເຈົ້າເປັນຜູ້ຊຳນານ ...ຂ້າພະເຈົ້າທຳປຖົມຢານແລະຈຕຸຕຖຢານໃຫ້ແຈ້ງແລ້ວ ...ຕ້ອງອາບັຕິປາຣາຊິກ ຯລຯ

ພຣະວິນັຍປິດົກ ມຫາວິພັງຄ໌ [໑. ປາຣາຊິກກັນທ໌] ປາຣາຊິກສິກຂາບົທທີ ໔ ບົທພາຊນີຍ໌

ປຖົມຢານກັບສຸຍຍຕວິໂມກຂ໌ ອນິມິຕຕວິໂມກຂ໌ແລະອັປປນິຫິຕວິໂມກຂ໌

ພິກສຸກ່າວເທັຈທັງທີ່ຮູ້ວ່າ ຂ້າພະເຈົ້າເຂົ້າປຖົມຢານແລະສຸຍຍຕວິໂມກຂ໌ແລ້ວ ດ້ວຍອາການ ໓ ຢ່າງ ຯລຯ ຂ້າພະເຈົ້າເຂົ້າປຖົມຢານແລະອນິມິຕຕວິໂມກຂ໌ ຯລຯ ປຖົມຢານແລະອັປປນິຫິຕວິໂມກຂ໌ແລ້ວ

...ຂ້າພະເຈົ້າເຂົ້າຢູ່ ...ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ ...ຂ້າພະເຈົ້າເປັນຜູ້ໄດ້ປຖົມຍານແລະອັປປນິຫິຕວິໂມກຂ໌ ...ຂ້າພະເຈົ້າເປັນຜູ້ຊຳນານ ...ຂ້າພະເຈົ້າທຳປຖົມຍານແລະອັປປນິຫິຕວິໂມກຂ໌ໃຫ້ແຈ້ງແລ້ວ ...ຕ້ອງອາບັຕິປາຣາຊິກ ຯລຯ

## ປຖົມຍານກັບສຸຍຍຕສມາທິ ອນິມິຕຕສມາທິແລະອັປປນິຫິຕສມາທິ

ພິກສຸກ່າວເທັຈທັງທີ່ຮູ້ວ່າ ຂ້າພະເຈົ້າເຂົ້າປຖົມຍານແລະສຸຍຍຕສມາທິແລ້ວ ດ້ວຍອາການ ໕ ຢ່າງ ຯລຯ ຂ້າພະເຈົ້າເຂົ້າປຖົມຍານແລະອນິມິຕສມາທິ ຯລຯ ປຖົມຍານແລະອັປປນິຫິຕສມາທິແລ້ວ ...ຂ້າພະເຈົ້າເຂົ້າຢູ່ ...ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ ...ຂ້າພະເຈົ້າເປັນຜູ້ໄດ້ປຖົມຍານແລະອັປປນິຫິຕສມາທິ ...ຂ້າພະເຈົ້າເປັນຜູ້ຊຳນານ ...ຂ້າພະເຈົ້າທຳປຖົມຍານແລະອັປປນິຫິຕສມາທິໃຫ້ແຈ້ງແລ້ວ ...ຕ້ອງອາບັຕິປາຣາຊິກ ຯລຯ

## ປຖົມຍານກັບສຸຍຍຕສມາບັຕິ ອນິມິຕຕສມາບັຕິແລະອັປປນິຫິຕສມາບັຕິ

ພິກສຸກ່າວເທັຈທັງທີ່ຮູ້ວ່າ ຂ້າພະເຈົ້າເຂົ້າປຖົມຍານແລະສຸຍຍຕສມາບັຕິແລ້ວ ດ້ວຍອາການ ໕ ຢ່າງ ຯລຯ ຂ້າພະເຈົ້າເຂົ້າປຖົມຍານແລະອນິມິຕຕສມາບັຕິ ຯລຯ ປຖົມຍານແລະອັປປນິຫິຕສມາບັຕິແລ້ວ ...ຂ້າພະເຈົ້າເຂົ້າຢູ່ ...ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ ...ຂ້າພະເຈົ້າເປັນຜູ້ໄດ້ປຖົມຍານແລະອັປປນິຫິຕສມາບັຕິ ...ຂ້າພະເຈົ້າເປັນຜູ້ຊຳນານ ...ຂ້າພະເຈົ້າທຳປຖົມຍານແລະອັປປນິຫິຕສມາບັຕິໃຫ້ແຈ້ງແລ້ວ ...ຕ້ອງອາບັຕິປາຣາຊິກ ຯລຯ

## ປຖົມຍານແລະວິຊຊາ ໓

ພິກສຸກ່າວເທັຈທັງທີ່ຮູ້ວ່າ ຂ້າພະເຈົ້າເຂົ້າປຖົມຍານແລະວິຊຊາ ໓ ແລ້ວ ດ້ວຍອາການ ໕ ຢ່າງ ...ຂ້າພະເຈົ້າເຂົ້າຢູ່ ...ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ ...ຂ້າພະເຈົ້າເປັນຜູ້ໄດ້ປຖົມຍານແລະວິຊຊາ ໓ ...ຂ້າພະເຈົ້າເປັນຜູ້ຊຳນານ ...ຂ້າພະເຈົ້າທຳປຖົມຍານແລະວິຊຊາ ໓ ໃຫ້ແຈ້ງແລ້ວ ...ຕ້ອງອາບັຕິປາຣາຊິກ ຯລຯ

## ພຣະວິນັຍປິດົກ ມຫາວິພັງຄ໌ [໑. ປາຣາຊິກກັນຫ໌] ປາຣາຊິກສິກຂາບົທທີ ໔ ບົທພາຊນີຍ໌ ປຖົມຢານກັບສຕິປັຕຖານ ໔ ສັມມັປປທານ ໔ ແລະອິທທິບາທ ໔

ພິກສຸກ່າວເທັຈທັງທີ່ຮູ້ວ່າ ຂ້າພະເຈົ້າເຂົ້າປຖົມຢານແລະສຕິປັຕຖານ ໔ ແລ້ວ ດ້ວຍອາການ ໓ ຢ່າງ ຯລຯ ຂ້າພະເຈົ້າເຂົ້າປຖົມຢານແລະສັມມັປປທານ ໔ ຯລຯ ປຖົມຢານແລະອິທທິບາທ ໔ ແລ້ວ ...ຂ້າພະເຈົ້າເຂົ້າຢູ່ ...ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ ...ຂ້າພະເຈົ້າເປັນຜູ້ໄດ້ປຖົມຢານແລະອິທທິບາທ ໔ ...ຂ້າພະເຈົ້າເປັນຜູ້ຊຳນານ ...ຂ້າພະເຈົ້າທຳປຖົມຢານແລະອິທທິບາທ ໔ ໃຫ້ແຈ້ງແລ້ວ ...ຕ້ອງອາບັຕິປາຣາຊິກ ຯລຯ

### ປຖົມຢານກັບອິນທຣີຍ໌ ໕ ແລະພລະ ໕

ພິກສຸກ່າວເທັຈທັງທີ່ຮູ້ວ່າ ຂ້າພະເຈົ້າເຂົ້າປຖົມຢານແລະອິນທຣີຍ໌ ໕ ແລ້ວ ດ້ວຍອາການ ໓ ຢ່າງ ຯລຯ ຂ້າພະເຈົ້າເຂົ້າປຖົມຢານແລະພລະ ໕ ແລ້ວ ...ຂ້າພະເຈົ້າເຂົ້າຢູ່ ...ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ ...ຂ້າພະເຈົ້າເປັນຜູ້ໄດ້ປຖົມຢານແລະພລະ ໕ ...ຂ້າພະເຈົ້າເປັນຜູ້ຊຳນານ ...ຂ້າພະເຈົ້າທຳປຖົມຢານແລະພລະ ໕ ໃຫ້ແຈ້ງແລ້ວ ...ຕ້ອງອາບັຕິປາຣາຊິກ ຯລຯ

### ປຖົມຢານກັບໂພຊຊົງຄ໌ ໗

[໑໐໙] ພິກສຸກ່າວເທັຈທັງທີ່ຮູ້ວ່າ ຂ້າພະເຈົ້າເຂົ້າປຖົມຢານແລະໂພຊຊົງຄ໌ ໗ ແລ້ວ ດ້ວຍອາການ ໓ ຢ່າງ ...ຂ້າພະເຈົ້າເຂົ້າຢູ່ ...ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ ...ຂ້າພະເຈົ້າເປັນຜູ້ໄດ້ປຖົມຢານແລະໂພຊຊົງຄ໌ ໗ ...ຂ້າພະເຈົ້າເປັນຜູ້ຊຳນານ ...ຂ້າພະເຈົ້າທຳປຖົມຢານແລະໂພຊຊົງຄ໌ ໗ ໃຫ້ແຈ້ງແລ້ວ ...ຕ້ອງອາບັຕິປາຣາຊິກ ຯລຯ

### ປຖົມຢານກັບອຣິຍມັຄມີອົງຄ໌ ໘

ພິກສຸກ່າວເທັຈທັງທີ່ຮູ້ວ່າ ຂ້າພະເຈົ້າເຂົ້າປຖົມຢານແລະອຣິຍມັຄມີອົງຄ໌ ໘ ...ຂ້າພະເຈົ້າເຂົ້າຢູ່ ...ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ ...ຂ້າພະເຈົ້າເປັນຜູ້ໄດ້ປຖົມຢານແລະອຣິຍມັຄມີອົງຄ໌ ໘ ...ຂ້າພະເຈົ້າເປັນຜູ້ຊຳນານ ...ຂ້າພະເຈົ້າທຳປຖົມຢານແລະອຣິຍມັຄມີອົງຄ໌ ໘ ໃຫ້ແຈ້ງແລ້ວ ...ຕ້ອງອາບັຕິປາຣາຊິກ ຯລຯ

## ປຖົມຢານກັບໂສດາປັດຕິຜລ ສກທາຄາມິຜລ ອນາຄາມິຜລແລະອຣຫັຕຕຜົລ

ພິກສຸກ່າວເທັຈທັງທີ່ຮູ້ວ່າ ຂ້າພະເຈົ້າເຂົ້າປຖົມຢານແລະໂສດາປັດຕິຜລແລ້ວ ດ້ວຍອາການ ໓ ຢ່າງ ຯລຯ ຂ້າພະເຈົ້າເຂົ້າປຖົມຢານແລະສກທາຄາມິຜົລ ຯລຯ ປຖົມຢານແລະອນາຄາມິຜົລ ຯລຯ ປຖົມຢານແລະອຣຫັຕຕຜົລແລ້ວ ...ຂ້າພະເຈົ້າເຂົ້າຢູ່ ...ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ ...ຂ້າພະເຈົ້າເປັນຜູ້ໄດ້ປຖົມຢານແລະອຣຫັຕຕຜົລ ...ຂ້າພະເຈົ້າເປັນຜູ້ຊໍານານ ...ຂ້າພະເຈົ້າທໍາປຖົມຢານແລະອຣຫັຕຕຜົລໃຫ້ແຈ້ງແລ້ວ ...ຕ້ອງອາບັຕິປາຣາຊິກ ຯລຯ

## ປຖົມຢານກັບການສລະຣາຄະ ໂທສະແລະໂມຫະ

ພິກສຸກ່າວເທັຈທັງທີ່ຮູ້ວ່າ ຂ້າພະເຈົ້າເຂົ້າປຖົມຢານແລ້ວ ດ້ວຍອາການ ໓ ຢ່າງ ...ຂ້າພະເຈົ້າເຂົ້າຢູ່ ...ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ ...ຂ້າພະເຈົ້າເປັນຜູ້ໄດ້ປຖົມຢານ ...ຂ້າພະເຈົ້າເປັນຜູ້ຊໍານານ ...ຂ້າພະເຈົ້າທໍາປຖົມຢານໃຫ້ແຈ້ງແລ້ວ ...ແລະຂ້າພະເຈົ້າສລະຣາຄະແລ້ວ ຯລຯ ຂ້າພະເຈົ້າເຂົ້າປຖົມຢານແລ້ວ ຯລຯ ແລະຂ້າພະເຈົ້າສລະໂທສະແລ້ວ ຯລຯ ຂ້າພະເຈົ້າເຂົ້າປຖົມຢານແລ້ວ ຯລຯ ແລະຂ້າພະເຈົ້າສລະ ຄາຍ ພົ້ນ ລະ ສລັດ ເພິກ ຖອນໂມຫະຂຶ້ນແລ້ວ ...ຕ້ອງອາບັຕິປາຣາຊິກ ຯລຯ

## ປຖົມຢານກັບພາວະທີ່ຈິຕປອດຈາກຣາຄະ ໂທສະແລະໂມຫະ

ພິກສຸກ່າວເທັຈທັງທີ່ຮູ້ວ່າ ຂ້າພະເຈົ້າເຂົ້າປຖົມຢານແລ້ວ ດ້ວຍອາການ ໓ ຢ່າງ ...ຂ້າພະເຈົ້າເຂົ້າຢູ່ ...ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ ...ຂ້າພະເຈົ້າເປັນຜູ້ໄດ້ປຖົມຢານ ...ຂ້າພະເຈົ້າເປັນຜູ້ຊໍານານ ...ຂ້າພະເຈົ້າທໍາປຖົມຢານໃຫ້ແຈ້ງແລ້ວ ...ແລະຈິຕຂອງຂ້າພະເຈົ້າປອດຈາກຣາຄະ ...ຈິຕຂອງຂ້າພະເຈົ້າປອດຈາກໂທສະ ...ຈິຕຂອງຂ້າພະເຈົ້າປອດຈາກໂມຫະ ດ້ວຍອາການ ໓ ຢ່າງ ຯລຯ ດ້ວຍອາການ ໗ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າ ຈັກກ່າວເທັຈ (໒) ກໍາລັງກ່າວ ກໍຮູ້ວ່າກໍາລັງກ່າວເທັຈ (໓) ຄັນກ່າວແລ້ວ ກໍຮູ້ວ່າກ່າວເທັຈແລ້ວ (໔) ອໍາພາງຄວາມເຫັນ (໕) ອໍາພາງຄວາມເຫັນຊອບ (໖) ອໍາພາງຄວາມພໍໃຈ (໗) ອໍາພາງຄວາມປະສົງຄ໌ ຕ້ອງອາບັຕິປາຣາຊິກ

ຂັນຖູຈັກຣ ຈົບ

## ພັທທຈັກຣ

[໔໑໐] ພິກສຸກ່າວເທັຈທັງທີ່ຮູ້ວ່າ ຂ້າພະເຈົ້າເຂົ້າທຸຕິຍຢານແລະຕຕິຍຢານແລ້ວ ດ້ວຍອາກາຣ ໓ ຢ່າງ ...ຂ້າພະເຈົ້າເຂົ້າຢູ່ ...ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ ...ຂ້າພະເຈົ້າເປັນຜູ້ໄດ້ທຸຕິຍຢານແລະຕຕິຍຢານ ...ຂ້າພະເຈົ້າເປັນຜູ້ຊຳນານ ...ຂ້າພະເຈົ້າທຳທຸຕິຍຢານແລະຕຕິຍຢານໃຫ້ແຈ້ງແລ້ວ ...ຕ້ອງອາບັຕິປາຣາຊິກ ຯລຯ

ພິກສຸກ່າວເທັຈທັງທີ່ຮູ້ວ່າ ຂ້າພະເຈົ້າເຂົ້າທຸຕິຍຢານແລະຈຕຸຕຖຢານແລ້ວ ດ້ວຍອາກາຣ ໓ ຢ່າງ ... ຂ້າພະເຈົ້າເຂົ້າຢູ່ ...ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ ...ຂ້າພະເຈົ້າເປັນຜູ້ໄດ້ທຸຕິຍຢານແລະຈຕຸຕຖຢານ ... ຂ້າພະເຈົ້າເປັນຜູ້ຊຳນານ ...ຂ້າພະເຈົ້າທຳທຸຕິຍຢານແລະຈຕຸຕຖຢານໃຫ້ແຈ້ງແລ້ວ ...ຕ້ອງອາບັຕິປາຣາຊິກ ຯລຯ

ພິກສຸກ່າວເທັຈທັງທີ່ຮູ້ວ່າ ຂ້າພະເຈົ້າເຂົ້າທຸຕິຍຢານແລະສຸຍ່ຍຕວິໂມກຂ໌ແລ້ວ ດ້ວຍອາກາຣ ໓ ຢ່າງ ຯລຯ ຂ້າພະເຈົ້າເຂົ້າທຸຕິຍຢານແລະອນິມິຕຕວິໂມກຂ໌ ຯລຯ ທຸຕິຍຢານແລະອັປປນິຫິຕວິໂມກຂ໌ ຯລຯ ທຸຕິຍຢານແລະສຸຍ່ຍຕສມາຫິ ຯລຯ ທຸຕິຍຢານແລະອນິມິຕຕສມາຫິ ຯລຯ ທຸຕິຍຢານແລະອັປປນິຫິຕສມາຫິ ຯລຯ ທຸຕິຍຢານແລະສຸຍ່ຍຕສມາບັຕິ ຯລຯ ທຸຕິຍຢານແລະອນິມິຕຕສມາບັຕິ ຯລຯ ທຸຕິຍຢານແລະອັປປນິຫິຕສມາບັຕິ ຯລຯ ທຸຕິຍຢານແລະວິຊຊາ ໓ ຯລຯ ທຸຕິຍຢານແລະສຕິປັຕຖານ ໔ ຯລຯ ທຸຕິຍຢານແລະສັມມັປປທານ ໔ ຯລຯ ທຸຕິຍຢານແລະອິທທິບາທ ໔ ຯລຯ ທຸຕິຍຢານແລະອິນທຣິຍ໌ ໕ ຯລຯ ທຸຕິຍຢານແລະພລະ ໕ ຯລຯ ທຸຕິຍຢານແລະໂພຊຍັງຄ໌ ໗ ຯລຯ ທຸຕິຍຢານແລະອຣິຍມັຄມີອົງຄ໌ ໘ ຯລຯ ທຸຕິຍຢານແລະໂສດາປັຕຕິຜລ ຯລຯ ທຸຕິຍຢານແລະສກທາຄາມິຜລ ຯລຯ ທຸຕິຍຢານແລະອນາຄາມິຜົລ ຯລຯ ທຸຕິຍຢານແລະອຣຫັຕຕຜົລແລ້ວ ... ຂ້າພະເຈົ້າເຂົ້າຢູ່ ...ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ ...ຂ້າພະເຈົ້າເປັນຜູ້ໄດ້ທຸຕິຍຢານແລະອຣຫັຕຕຜົລ ... ຂ້າພະເຈົ້າເປັນຜູ້ຊຳນານ ...ຂ້າພະເຈົ້າທຳທຸຕິຍຢານແລະອຣຫັຕຕຜົລໃຫ້ແຈ້ງແລ້ວ...ຕ້ອງອາບັຕິປາຣາຊິກ ຯລຯ

ພິກສຸກ່າວເທັຈທັງທີ່ຮູ້ວ່າ ຂ້າພະເຈົ້າເຂົ້າທຸຕິຍຢານແລ້ວ ດ້ວຍອາກາຣ ໓ ຢ່າງ ...ຂ້າພະເຈົ້າເຂົ້າຢູ່ ...ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ ...ຂ້າພະເຈົ້າເປັນຜູ້ໄດ້ທຸຕິຍຢານ...ຂ້າພະເຈົ້າເປັນຜູ້ຊຳນານ ...ຂ້າພະເຈົ້າທຳທຸຕິຍຢານໃຫ້ແຈ້ງແລ້ວ ...ຂ້າພະເຈົ້າສລະຣາຄະແລ້ວ ...ຂ້າພະເຈົ້າສລະໂທສະແລ້ວ ...ຂ້າພະເຈົ້າ

ສລະ ຄາຍ ພົ້ນ ລະ ສລັດ ເພິກ ຖອນໂມຫະຂຶ້ນແລ້ວ ຯລຯ ຂ້າພະເຈົ້າເຂົ້າທຸຕິຍຢານແລ້ວ ຯລຯ ຈິຕຂອງຂ້າພະເຈົ້າປອດຈາກຣາຄະ ຯລຯ ຂ້າພະເຈົ້າເຂົ້າທຸຕິຍຢານແລ້ວ ຯລຯ ຈິຕຂອງຂ້າພະເຈົ້າປອດຈາກໂທສະ ຯລຯ ຂ້າພະເຈົ້າເຂົ້າທຸຕິຍຢານແລ້ວ ຯລຯ ຈິຕຂອງຂ້າພະເຈົ້າປອດຈາກໂມຫະ ... ຕ້ອງອາບັຕິປາຣາຊິກ ຯລຯ

ພິກສຸກ່າວເທັຈທັງທີ່ຮູ້ວ່າ ຂ້າພະເຈົ້າເຂົ້າທຸຕິຍຢານແລະປຖົມຢານແລ້ວ ດ້ວຍອາການ ໕ ຢ່າງ ຯລຯ ດ້ວຍອາການ ໗ ຢ່າງ ...ຂ້າພະເຈົ້າເຂົ້າຢູ່ ...ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ ...ຂ້າພະເຈົ້າເປັນຜູ້ໄດ້ທຸຕິຍຢານແລະປຖົມຢານ ...ຂ້າພະເຈົ້າເປັນຜູ້ຊຳນານ ...ຂ້າພະເຈົ້າທຳທຸຕິຍຢານແລະປຖົມຢານໃຫ້ແຈ້ງແລ້ວ ດ້ວຍອາການ ໗ ຢ່າງ ຄື ...(໗) ອຳພາງຄວາມປະສົງຄ໌ ຕ້ອງອາບັຕິປາຣາຊິກ.

ພັທຫຼຈັກຣ ຈົບ

ເພິງຕັ້ງອຸຕຕຣິມນຸສສທັມຂໍ້ອື່ນຢ່າງນຶ່ງໆ ຫມຸນວຽນໄປຈົນຄຣບດ້ວຍວິທີນີ້ ຄຳທີ່ຈະກ່າວຕໍ່ໄປນີ້ເປັນຄຳທີ່ທ່ານຫຍໍ້ໄວ້

ພັທຫຼຈັກຣ ເອກມູລກນັຍ

[໔໑໑] ພິກສຸກ່າວເທັຈທັງທີ່ຮູ້ວ່າ ຂ້າພະເຈົ້າເຂົ້າຕຕິຍຢານແລະຈຕຸຕຖຢານແລ້ວ ດ້ວຍອາການ ໕ ຢ່າງ ຯລຯ ຂ້າພະເຈົ້າເຂົ້າຕຕິຍຢານແລະອຣຫັຕຕຜົລແລ້ວ ...ຂ້າພະເຈົ້າເຂົ້າຢູ່ ...ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ ...ຂ້າພະເຈົ້າເປັນຜູ້ໄດ້ຕຕິຍຢານແລະອຣຫັຕຕຜົລ ...ຂ້າພະເຈົ້າເປັນຜູ້ຊຳນານ ...ຂ້າພະເຈົ້າທຳຕຕິຍຢານແລະອຣຫັຕຕຜົລໃຫ້ແຈ້ງແລ້ວ ...ຕ້ອງອາບັຕິປາຣາຊິກ ຯລຯ

ພິກສຸກ່າວເທັຈທັງທີ່ຮູ້ວ່າ ຂ້າພະເຈົ້າເຂົ້າຕຕິຍຢານແລ້ວ ດ້ວຍອາການ ໕ ຢ່າງ ...ຂ້າພະເຈົ້າເຂົ້າຢູ່ ...ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ ...ຂ້າພະເຈົ້າເປັນຜູ້ໄດ້ຕຕິຍຢານ...ຂ້າພະເຈົ້າເປັນຜູ້ຊຳນານ ...ຂ້າພະເຈົ້າທຳຕຕິຍຢານໃຫ້ແຈ້ງແລ້ວ ...ຂ້າພະເຈົ້າສລະຣາຄະແລ້ວ ຯລຯ ຂ້າພະເຈົ້າສລະໂທສະແລ້ວ ຯລຯ ຂ້າພະເຈົ້າສລະ ຄາຍ ພົ້ນ ລະ ສລັດ ເພິກ ຖອນໂມຫະຂຶ້ນແລ້ວ ...ຈິຕຂອງຂ້າພະເຈົ້າປອດຈາກຣາຄະ ...ຈິຕຂອງຂ້າພະເຈົ້າປອດຈາກໂທສະ ...ຈິຕຂອງຂ້າພະເຈົ້າປອດຈາກໂມຫະ ...ຕ້ອງອາບັຕິປາຣາຊິກ ຯລຯ

ພິກສຸກ່າວເທັຈທັງທີ່ຮູ້ວ່າ ຂ້າພະເຈົ້າເຂົ້າຕຕິຍຢານແລະປຖົມຢານ ດ້ວຍອາກາຣ ໓ ຢ່າງ ...ຂ້າພະເຈົ້າເຂົ້າຕຕິຍຢານແລະທຸຕິຍຢານແລ້ວ ...ຂ້າພະເຈົ້າເຂົ້າຢູ່ ...ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ ...ຂ້າພະເຈົ້າເປັນຜູ້ໄດ້ຕຕິຍຢານແລະທຸຕິຍຢານ ...ຂ້າພະເຈົ້າເປັນຜູ້ຊຳນານ ...ຂ້າພະເຈົ້າທຳຕຕິຍຢານແລະທຸຕິຍຢານໃຫ້ແຈ້ງແລ້ວ ...ຕ້ອງອາບັຕິປາຣາຊິກ ຯລຯ

ພິກສຸກ່າວເທັຈທັງທີ່ຮູ້ວ່າ ຈິຕຂອງຂ້າພະເຈົ້າປອດຈາກໂມຫະ ແລະຂ້າພະເຈົ້າເຂົ້າປຖົມຢານແລ້ວ ດ້ວຍອາກາຣ ໓ ຢ່າງ ຯລຯ ຂ້າພະເຈົ້າເຂົ້າທຸຕິຍຢານ ຯລຯ ຕຕິຍຢານ ຯລຯ ແລະຈຕຸຕຖ ...ຂ້າພະເຈົ້າເຂົ້າຢູ່ ...ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ ...ຈິຕຂອງຂ້າພະເຈົ້າປອດຈາກໂມຫະ ...ຂ້າພະເຈົ້າເປັນຜູ້ໄດ້ຈຕຸຕຖຢານ ...ຂ້າພະເຈົ້າເປັນຜູ້ຊຳນານ ...ຈິຕຂອງຂ້າພະເຈົ້າປອດຈາກໂມຫະ ແລະຂ້າພະເຈົ້າທຳຈຕຸຕຖຢານໃຫ້ແຈ້ງແລ້ວ ຕ້ອງອາບັຕິປາຣາຊິກ

[໔໑໔] ພິກສຸກ່າວເທັຈທັງທີ່ຮູ້ວ່າ ຈິຕຂອງຂ້າພະເຈົ້າປອດຈາກໂມຫະແລະຂ້າພະເຈົ້າເຂົ້າສຸຍຍຕວິໂມກຂ໌ແລ້ວ ດ້ວຍອາກາຣ ໓ ຢ່າງ ...ຂ້າພະເຈົ້າເຂົ້າອນິມິຕຕວິໂມກຂ໌ ...ອັປປນິຫິຕວິໂມກຂ໌ແລ້ວ ...ຂ້າພະເຈົ້າເຂົ້າຢູ່ ...ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ ...ຈິຕຂອງຂ້າພະເຈົ້າປອດຈາກໂມຫະ ຂ້າພະເຈົ້າເປັນຜູ້ໄດ້ອັປປນິຫິຕວິໂມກຂ໌ ...ຂ້າພະເຈົ້າເປັນຜູ້ຊຳນານ ...ຈິຕຂອງຂ້າພະເຈົ້າປອດຈາກໂມຫະ ແລະຂ້າພະເຈົ້າທຳອັປປນິຫິຕວິໂມກຂ໌ໃຫ້ແຈ້ງແລ້ວ ຕ້ອງອາບັຕິປາຣາຊິກ ຯລຯ

ພິກສຸກ່າວເທັຈທັງທີ່ຮູ້ວ່າ ຈິຕຂອງຂ້າພະເຈົ້າປອດຈາກໂມຫະແລະຂ້າພະເຈົ້າເຂົ້າສຸຍຍຕສມາທິແລ້ວ ດ້ວຍອາກາຣ ໓ ຢ່າງ ...ຂ້າພະເຈົ້າເຂົ້າອນິມິຕຕສມາທິ ...ອັປປນິຫິຕສມາທິແລ້ວ ...ຂ້າພະເຈົ້າເຂົ້າຢູ່ ...ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ ...ຈິຕຂອງຂ້າພະເຈົ້າປອດຈາກໂມຫະຂ້າພະເຈົ້າເປັນຜູ້ໄດ້ອັປປນິຫິຕສມາທິ ...ຂ້າພະເຈົ້າເປັນຜູ້ຊຳນານ ...ຈິຕຂອງຂ້າພະເຈົ້າປອດຈາກໂມຫະ ແລະຂ້າພະເຈົ້າທຳອັປປນິຫິຕສມາທິໃຫ້ແຈ້ງແລ້ວ ຕ້ອງອາບັຕິປາຣາຊິກ ຯລຯ ພິກສຸກ່າວເທັຈທັງທີ່ຮູ້ວ່າ ຈິຕຂອງຂ້າພະເຈົ້າປອດຈາກໂມຫະແລະຂ້າພະເຈົ້າເຂົ້າສຸຍຍຕສມາບັຕິແລ້ວ ດ້ວຍອາກາຣ ໓ ຢ່າງ ...ຂ້າພະເຈົ້າເຂົ້າອນິມິຕຕສມາບັຕິ ...ອັປປນິຫິຕສມາບັຕິແລ້ວ ...ຂ້າພະເຈົ້າເຂົ້າຢູ່ ...ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ ...ຈິຕຂອງຂ້າພະເຈົ້າປອດຈາກໂມຫະ ຂ້າພະເຈົ້າເປັນຜູ້ໄດ້ອັປປນິຫິຕສມາບັຕິ ...ຂ້າພະເຈົ້າເປັນຜູ້ຊຳນານ...ຈິຕຂອງຂ້າພະເຈົ້າປອດຈາກໂມຫະ ແລະຂ້າພະເຈົ້າທຳອັປປນິຫິຕສມາບັຕິໃຫ້ແຈ້ງແລ້ວ ຕ້ອງອາບັຕິປາຣາຊິກ ຯລຯ

ພິກສຸກ່າວເທັຈທັງທີ່ຮູ້ວ່າ ຈິຕຂອງຂ້າພະເຈົ້າປອດຈາກໂມຫະແລະຂ້າພະເຈົ້າເຂົ້າວິຊຊາ ໓ ແລ້ວ ດ້ວຍອາການ ໓ ຢ່າງ ...ຂ້າພະເຈົ້າເຂົ້າຢູ່ ...ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ ...ຈິຕຂອງຂ້າພະເຈົ້າປອດຈາກໂມຫະ ແລະຂ້າພະເຈົ້າເປັນຜູ້ໄດ້ວິຊຊາ ໓ ...ຂ້າພະເຈົ້າເປັນຜູ້ຊຳນານ ...ຈິຕຂອງຂ້າພະເຈົ້າປອດຈາກໂມຫະແລະຂ້າພະເຈົ້າທຳວິຊຊາ ໓ ໃຫ້ແຈ້ງແລ້ວ ...ຕ້ອງອາບັຕິປາຣາຊິກ

ພິກສຸກ່າວເທັຈທັງທີ່ຮູ້ວ່າ ຈິຕຂອງຂ້າພະເຈົ້າປອດຈາກໂມຫະແລະຂ້າພະເຈົ້າເຂົ້າສຕິປັຕຖານ ໔ ແລ້ວ ດ້ວຍອາການ ໓ ຢ່າງ ...ຂ້າພະເຈົ້າເຂົ້າສັມມັປປທານ ໔ ...ອິທທິບາທ ໔ ແລ້ວ ...ຂ້າພະເຈົ້າເຂົ້າຢູ່ ...ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ ...ຈິຕຂອງຂ້າພະເຈົ້າປອດຈາກໂມຫະແລະຂ້າພະເຈົ້າເປັນຜູ້ໄດ້ອິທທິບາທ ໔ ...ຂ້າພະເຈົ້າເປັນຜູ້ຊຳນານ ...ຈິຕຂອງຂ້າພະເຈົ້າປອດຈາກໂມຫະແລະຂ້າພະເຈົ້າທຳອິທທິບາທ ໔ ໃຫ້ແຈ້ງແລ້ວ ...ຕ້ອງອາບັຕິປາຣາຊິກ

[໔໑໓] ພິກສຸກ່າວເທັຈທັງທີ່ຮູ້ວ່າ ຈິຕຂອງຂ້າພະເຈົ້າປອດຈາກໂມຫະ ແລະຂ້າພະເຈົ້າເຂົ້າອິນທຣີຍ໌ ໕ ແລ້ວ ດ້ວຍອາການ ໓ ຢ່າງ ຯລຯ ຂ້າພະເຈົ້າເຂົ້າພລະ ໕ ແລ້ວ ...ຂ້າພະເຈົ້າເຂົ້າຢູ່ ...ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ ...ຈິຕຂອງຂ້າພະເຈົ້າປອດຈາກໂມຫະ ແລະຂ້າພະເຈົ້າເປັນຜູ້ໄດ້ພລະ ໕ ...ຂ້າພະເຈົ້າເປັນຜູ້ຊຳນານ ...ຈິຕຂອງຂ້າພະເຈົ້າປອດຈາກໂມຫະແລະຂ້າພະເຈົ້າທຳພລະ ໕ ໃຫ້ແຈ້ງແລ້ວ ...ຕ້ອງອາບັຕິປາຣາຊິກ

ພິກສຸກ່າວເທັຈທັງທີ່ຮູ້ວ່າ ຈິຕຂອງຂ້າພະເຈົ້າປອດຈາກໂມຫະ ແລະຂ້າພະເຈົ້າເຂົ້າໂພຊຊັງຄ໌ ໗ ແລ້ວ ດ້ວຍອາການ ໓ ຢ່າງ ...ຂ້າພະເຈົ້າເຂົ້າຢູ່ ...ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ ຈິຕຂອງຂ້າພະເຈົ້າປອດຈາກໂມຫະ ແລະຂ້າພະເຈົ້າເປັນຜູ້ໄດ້ໂພຊຊັງຄ໌ ໗ ...ຂ້າພະເຈົ້າເປັນຜູ້ຊຳນານ ...ຈິຕຂອງຂ້າພະເຈົ້າປອດຈາກໂມຫະ ແລະຂ້າພະເຈົ້າທຳໂພຊຊັງຄ໌ ໗ ໃຫ້ແຈ້ງແລ້ວ ...ຕ້ອງອາບັຕິປາຣາຊິກ

ພິກສຸກ່າວເທັຈທັງທີ່ຮູ້ວ່າ ຈິຕຂອງຂ້າພະເຈົ້າປອດຈາກໂມຫະ ແລະຂ້າພະເຈົ້າເຂົ້າອຣິຍມັຄມີອົງຄ໌ ໘ ແລ້ວ ດ້ວຍອາການ ໓ ຢ່າງ ...ຂ້າພະເຈົ້າເຂົ້າຢູ່ ...ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ ຈິຕຂອງຂ້າພະເຈົ້າປອດຈາກໂມຫະ ຂ້າພະເຈົ້າເປັນຜູ້ໄດ້ອຣິຍມັຄມີອົງຄ໌ ໘ ...ຂ້າພະເຈົ້າເປັນຜູ້ຊຳນານ ...ຈິຕຂອງຂ້າພະເຈົ້າປອດຈາກໂມຫະ ແລະຂ້າພະເຈົ້າທຳອຣິຍມັຄມີອົງຄ໌ ໘ ໃຫ້ແຈ້ງແລ້ວ ...ຕ້ອງອາບັຕິປາຣາຊິກ

ພິກສຸກ່າວເທັຈທັງທີ່ຮູ້ວ່າ ຈິຕຂອງຂ້າພະເຈົ້າປອດຈາກໂມຫະ ແລະຂ້າພະເຈົ້າເຂົ້າໂສດາປັຕຕິຜລແລ້ວ ດ້ວຍອາການ ໓ ຢ່າງ ...ຂ້າພະເຈົ້າເຂົ້າສກທາຄາມິຜລ ຯລຯ ອນາຄາມິຜົລ ຯລຯ ອຣຫັຕຕຜົລແລ້ວ ...ຂ້າພະເຈົ້າເຂົ້າຢູ່ ...ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ ...ຈິຕຂອງຂ້າພະເຈົ້າປອດຈາກໂມຫະ ແລະຂ້າພະເຈົ້າເປັນຜູ້ໄດ້ອຣຫັຕຕຜົລ ...ຂ້າພະເຈົ້າເປັນຜູ້ຊຳນານ...ຈິຕຂອງຂ້າພະເຈົ້າປອດຈາກໂມຫະ ແລະຂ້າພະເຈົ້າທຳອຣຫັຕຕຜົລໃຫ້ແຈ້ງແລ້ວ ...ຕ້ອງອາບັຕິປາຣາຊິກ

ພິກສຸກ່າວເທັຈທັງທີ່ຮູ້ວ່າ ຈິຕຂອງຂ້າພະເຈົ້າປອດຈາກໂມຫະ ແລະຂ້າພະເຈົ້າສລະຣາຄະແລ້ວ ດ້ວຍອາການ ໓ ຢ່າງ ຯລຯ ຂ້າພະເຈົ້າສລະໂທສະແລ້ວ ຯລຯ ຂ້າພະເຈົ້າສລະ ຄາຍພົ້ນ ລະ ສລັດເພິກ ຖອນໂມຫະຂຶ້ນແລ້ວ ...ຕ້ອງອາບັຕິປາຣາຊິກ

ພິກສຸກ່າວເທັຈທັງທີ່ຮູ້ວ່າ ຈິຕຂອງຂ້າພະເຈົ້າປອດຈາກໂມຫະ ຯລຯ ຈິຕຂອງຂ້າພະເຈົ້າປອດຈາກຣາຄະ ຯລຯ ຈິຕຂອງຂ້າພະເຈົ້າປອດຈາກໂທສະ ດ້ວຍອາການ ໓ ຢ່າງ ຯລຯ ດ້ວຍອາການ ໗ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າ ຈັກກ່າວເທັຈ (໒) ກຳລັງກ່າວ ກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວ ກໍຮູ້ວ່າກ່າວເທັຈແລ້ວ (໔) ອຳພາງຄວາມເຫັນ (໕) ອຳພາງຄວາມເຫັນຊອບ (໖) ອຳພາງຄວາມພໍໃຈ (໗) ອຳພາງ
ຄວາມປະສົງຄ໌ ຕ້ອງອາບັຕິປາຣາຊິກ

ພັທທຈັກຣເອກມູລກນັຍ ຈົບ

ແມ່ນພັທທຈັກຣທຸມູລກນັຍເປັນຕົ້ນກໍເພິງໃຫ້ພິສດານເຫມືອນພັທທຈັກຣເອກມູລກນັຍທີ່ໃຫ້ພິສດານແລ້ວ
ຄຳທີ່ຈະກ່າວຕໍ່ໄປນີ້ເປັນພັທທຈັກຣສັພພມູລກນັຍ

ພັທທຈັກຣ ສັພພມູລກນັຍ

[໔໑໔] ພິກສຸກ່າວເທັຈທັງທີ່ຮູ້ວ່າ ຂ້າພະເຈົ້າເຂົ້າປຖົມຢານ ທຸຕິຍຢານ ຕຕິຍຢານ ຈຕຸຕຖຢານ ສຸຍຍຕວິໂມກຂ໌ ອນິມິຕຕວິໂມກຂ໌ ອັປປນິຫິຕວິໂມກຂ໌ ສຸຍຍຕສມາທິ ອນິມິຕຕສມາທິ ອັປປນິຫິຕສມາທິ ສຸຍຍຕສມາບັຕິ ອນິມິຕຕສມາບັຕິ ອັປປນິຫິຕສມາບັຕິ ວິຊຊາ ໓ ສຕິປັຕຖານ ໔

ສັມມັປປທານ ໔ ອິທທິບາທ ໔ ອິນທຣີຍ໌ ໕ ພລະ ໕ ໂພຊຊົງຄ໌ ໗ ອຣິຍມັຄມີອົງຄ໌ ໘ ໂສດາປັຕຕິຜລ ສກທາຄາມິຜລ ອນາຄາມິຜລແລະອຣຫັຕຕຜົລ ...ຂ້າພະເຈົ້າເຂົ້າຢູ່ ...ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ ຯລຯ ຂ້າພະເຈົ້າສລະຣາຄະແລ້ວ ຯລຯ ຂ້າພະເຈົ້າສລະໂທສະແລ້ວ ຯລຯ ຂ້າພະເຈົ້າສລະຄາຍ ພົ້ນ ລະ ສລັດ ເພີກ ຖອນໂມຫະຂຶ້ນແລ້ວ ...ຈິຕຂອງຂ້າພະເຈົ້າປອດຈາກຣາຄະ ຈິຕຂອງຂ້າພະເຈົ້າປອດຈາກໂທສະ ຈິຕຂອງຂ້າພະເຈົ້າປອດຈາກໂມຫະ ດ້ວຍອາການ ໓ ຢ່າງ ຯລຯ ດ້ວຍອາການ ໗ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າຈັກກ່າວເທັຈ (໒) ກຳລັງກ່າວ ກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວ ກໍຮູ້ວ່າກ່າວເທັຈແລ້ວ (໔) ອຳພາງຄວາມເຫັນ (໕) ອຳພາງຄວາມເຫັນຊອບ (໖) ອຳພາງຄວາມພໍໃຈ (໗) ອຳພາງຄວາມປະສົງຄ໌ ຕ້ອງອາບັຕິປາຣາຊິກ

ສັພພມູລກນັຍ ຈົບ

ສຸທທິກວາຣກຖາ ຈົບ

## ວັຕຖຸການວາຣກຖາ
## ຂັນຫຼຈັກຣແຫ່ງເອກມູລກນັຍ
## ວັຕຖຸວິສາຣກະ

[໔໑໕] ພິກສຸຕ້ອງການຈະກ່າວວ່າ ຂ້າພະເຈົ້າເຂົ້າປຖົມຢານແລ້ວ ແຕ່ກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າເຂົ້າທຸຕິຍຢານແລ້ວ" ດ້ວຍອາການ ໓ ຢ່າງ ...ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິປາຣາຊິກ ເມື່ອເຂົາບໍ່ເຂົ້າໃຈ ຕ້ອງອາບັຕິຖຸລລັຈຈັຍ

ພິກສຸຕ້ອງການຈະກ່າວວ່າ ຂ້າພະເຈົ້າເຂົ້າປຖົມຢານແລ້ວ ແຕ່ກ່າວເທັຈທັງທີ່ຮູ້ວ່າຂ້າພະເຈົ້າເຂົ້າຕຕິຍຢານແລ້ວ ດ້ວຍອາການ ໓ ຢ່າງ ...ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິປາຣາຊິກເມື່ອເຂົາບໍ່ເຂົ້າໃຈ ຕ້ອງອາບັຕິຖຸລລັຈຈັຍ

ພິກສຸຕ້ອງການຈະກ່າວວ່າ ຂ້າພະເຈົ້າເຂົ້າປຖົມຢານແລ້ວ ແຕ່ກ່າວເທັຈທັງທີ່ຮູ້ວ່າຂ້າພະເຈົ້າເຂົ້າຈຕຸຕຖຢານແລ້ວ ດ້ວຍອາການ ໓ ຢ່າງ ...ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິປາຣາຊິກ ເມື່ອເຂົາບໍ່ເຂົ້າໃຈ ຕ້ອງອາບັຕິຖຸລ ລັຈຈັຍ

ພິກສຸຕ້ອງການຈະກ່າວວ່າ ຂ້າພະເຈົ້າເຂົ້າປຖົມຢານແລ້ວ ແຕ່ກ່າວເທັຈທັງທີ່ຮູ້ວ່າ ຂ້າພະເຈົ້າເຂົ້າສຸຍຍົຕວິໂມກຂ໌ ຯລຯ ອນິມິຕຕວິໂມກຂ໌ ຯລຯ ອັປປນິຫິຕວິໂມກຂ໌ ຯລຯ ສຸຍຍົຕສມາທິ ຯລຯ ອນິມິຕຕສມາທິ ຯລຯ ອັປປນິຫິຕສມາທິ ຯລຯ ສຸຍຍົຕສມາບັຕິ ຯລຯ ອນິມິຕຕສມາບັຕິ ຯລຯ ອັປປນິຫິຕສມາບັຕິ ຯລຯ ວິຊຊາ ໓ ຯລຯ ສຕິປັຕຖານ ໔ ຯລຯ ສັມມັປປທານ ໔ ຯລຯ ອິທທິບາທ ໔ ຯລຯ ອິນທຣີຍ໌ ໕ ຯລຯ ພລະ ໕ ຯລຯ ໂພຊຊົງຄ໌ ໗ ຯລຯ ອຣິຍມັຄມີອົງຄ໌ ໘ ຯລຯ ໂສດາປັຕຕິຜລ ຯລຯ ສກທາຄາມິຜລ ຯລຯ ອນາຄາມິຜລ ຯລຯ ອຣຫັຕຕຜົລແລ້ວ ດ້ວຍອາການ ໓ ຢ່າງ ...ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິປາຣາຊິກ ເມື່ອເຂົາບໍ່ເຂົ້າໃຈ ຕ້ອງອາບັຕິຖຸລລັຈຈັຍ ຯລຯ

ພິກສຸຕ້ອງການຈະກ່າວວ່າ ຂ້າພະເຈົ້າເຂົ້າປຖົມຢານແລ້ວ ແຕ່ກ່າວເທັຈທັງທີ່ຮູ້ວ່າ ຂ້າພະເຈົ້າສລະຣາຄະແລ້ວ ຯລຯ ຂ້າພະເຈົ້າສລະໂທສະແລ້ວ ຯລຯ ຂ້າພະເຈົ້າສລະ ຄາຍ ພົ້ນລະ ສລັດ ເພີກຖອນໂມຫະຂຶ້ນແລ້ວ ດ້ວຍອາການ ໓ ຢ່າງ ...ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິປາຣາຊິກ ເມື່ອເຂົາບໍ່ເຂົ້າໃຈ ຕ້ອງອາບັຕິຖຸລລັຈຈັຍ ຯລຯ

ພິກສຸຕ້ອງການຈະກ່າວວ່າ ຂ້າພະເຈົ້າເຂົ້າປຖົມຢານແລ້ວ ແຕ່ກ່າວເທັຈທັງທີ່ຮູ້ວ່າ ຈິຕຂອງຂ້າພະເຈົ້າປອດຈາກຣາຄະ ຯລຯ ຈິຕຂອງຂ້າພະເຈົ້າປອດຈາກໂທສະ ຯລຯ ຈິຕຂອງຂ້າພະເຈົ້າປອດຈາກໂມຫະ ດ້ວຍອາການ ໓ ຢ່າງ ຄື (໑) ເບື້ອງຕົ້ນ ທ່ານຮູ້ວ່າຈັກກ່າວເທັຈ (໒) ກໍາລັງກ່າວຢູ່ກໍຮູ້ວ່າກໍາລັງກ່າວເທັຈ (໓) ຄັນກ່າວແລ້ວ ກໍຮູ້ວ່າກ່າວເທັຈແລ້ວ (໔) ອໍາພາງຄວາມເຫັນ (໕) ອໍາພາງຄວາມເຫັນຊອບ (໖) ອໍາພາງຄວາມພໍໃຈ (໗) ອໍາພາງຄວາມປະສົງຄ໌ ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິປາຣາຊິກ ເມື່ອເຂົາບໍ່ເຂົ້າໃຈ ຕ້ອງອາບັຕິຖຸລລັຈຈັຍ

ຂັນຍຫຼຈັກຣແຫ່ງເອກມູລກນັຍ ອັຕຖຸວິສາຣກະ ຈົບ

ພັທຫຼຈັກຣ ເອກມູລກນັຍ ແຫ່ງອັຕຖຸວິສາຣກະ

[໑໑໖] ພິກສຸຕ້ອງການຈະກ່າວວ່າ ຂ້າພະເຈົ້າເຂົ້າທຸຕິຍຢານແລ້ວ ແຕ່ກ່າວເທັຈທັງທີ່ຮູ້ວ່າຂ້າພະເຈົ້າເຂົ້າຕຕິຍຢານແລ້ວ ດ້ວຍອາການ ໓ ຢ່າງ ...ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິປາຣາຊິກ ເມື່ອເຂົາບໍ່ເຂົ້າໃຈ ຕ້ອງອາບັຕິຖຸລລັຈຈັຍ ຯລຯ

ພິກສຸຕ້ອງການຈະກ່າວວ່າ ຂ້າພະເຈົ້າເຂົ້າທຸຕິຍຢານແລ້ວ ແຕ່ກ່າວເທັຈທັງທີ່ຮູ້ວ່າ ຂ້າພະເຈົ້າເຂົ້າຈຕຸຕຖຢານແລ້ວ ດ້ວຍອາການ ໓ ຢ່າງ ຯລຯ ຈິຕຂອງຂ້າພະເຈົ້າປອດຈາກໂມຫະ ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິປາຣາຊິກ ເມື່ອເຂົາບໍ່ເຂົ້າໃຈ ຕ້ອງອາບັຕິຖຸລລັຈຈັຍ ຯລຯ

ພິກສຸຕ້ອງການຈະກ່າວວ່າ ຂ້າພະເຈົ້າເຂົ້າທຸຕິຍຢານແລ້ວ ແຕ່ກ່າວເທັຈທັງທີ່ຮູ້ວ່າ ຂ້າພະເຈົ້າເຂົ້າປຖົມຢານແລ້ວ ດ້ວຍອາການ ໓ ຢ່າງ ຯລຯ ດ້ວຍອາການ ໗ ຢ່າງ ຄື ຯລຯ (໗) ອຳພາງຄວາມປະສົງຄ໌ ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິປາຣາຊິກ ເມື່ອເຂົາບໍ່ເຂົ້າໃຈ ຕ້ອງອາບັຕິຖຸລລັຈຈັຍ ຯລຯ

ພັທທຈັກຣ ເອກມູລກນັຍແຫ່ງວັຕຖຸວິສາຣກະ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໑. ປາຣາຊິກກັນທ໌] ປາຣາຊິກສິກຂາບົທທີ ໔ ບົທພາຊນີຍ໌
ຫົວຂໍ້ແຫ່ງພັທທຈັກຣທີ່ທ່ານຫຍໍ້ໄວ້

[໔໑໗] ພິກສຸຕ້ອງການກ່າວວ່າ ຈິຕຂອງຂ້າພະເຈົ້າປອດຈາກໂມຫະ ແຕ່ກ່າວເທັຈທັງທີ່ຮູ້ວ່າ ຂ້າພະເຈົ້າເຂົ້າປຖົມຢານ ດ້ວຍອາການ ໓ ຢ່າງ ...ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິປາຣາຊິກ ເມື່ອເຂົາບໍ່ເຂົ້າໃຈ ຕ້ອງອາບັຕິຖຸລລັຈຈັຍ ຯລຯ

ພິກສຸຕ້ອງການຈະກ່າວວ່າ ຈິຕຂອງຂ້າພະເຈົ້າປອດຈາກໂມຫະ ແຕ່ກ່າວເທັຈທັງທີ່ຮູ້ວ່າ ຈິຕຂອງຂ້າພະເຈົ້າປອດຈາກໂທສະ ດ້ວຍອາການ ໓ ຢ່າງ ຄື ຯລຯ ດ້ວຍອາການ ໗ ຢ່າງ ຯລຯ (໗) ອຳພາງຄວາມປະສົງຄ໌ ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິປາຣາຊິກ ເມື່ອເຂົາບໍ່ເຂົ້າໃຈ ຕ້ອງອາບັຕິຖຸລລັຈຈັຍ

ພັທທຈັກຣ ເອກມູລກນັຍ ແຫ່ງວັຕຖຸວິສາຣກະ ທີ່ທ່ານຫຍໍ້ໄວ້ ຈົບ

ຂັນທຈັກຣທຸມູລກນັຍ ແຫ່ງວັຕຖຸວິສາຣກະ

ພິກສຸຕ້ອງການຈະກ່າວວ່າ ຂ້າພະເຈົ້າເຂົ້າປຖົມຢານແລະທຸຕິຍຢານແລ້ວ ແຕ່ກ່າວເທັຈທັງທີ່ຮູ້ວ່າ ຂ້າພະເຈົ້າເຂົ້າຕຕິຍຢານແລ້ວ ດ້ວຍອາການ ໓ ຢ່າງ ...ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິປາຣາຊິກ ເມື່ອເຂົາບໍ່ເຂົ້າໃຈ ຕ້ອງອາບັຕິຖຸລລັຈຈັຍ ຯລຯ

ພິກຂຸຕ້ອງການຈະກ່າວວ່າ ຂ້າພະເຈົ້າເຂົ້າປຖົມຍານແລະທຸຕິຍຍານແລ້ວ ແຕ່ກ່າວເທັຈທັງທີ່ຮູ້ວ່າ ຈິຕຂອງຂ້າພະເຈົ້າປອດຈາກໂມຫະ ດ້ວຍອາການ ໓ ຢ່າງ ฯລฯ ດ້ວຍອາການ ໗ ຢ່າງ ຄື ฯລฯ (໗) ອຳພາງຄວາມປະສົງຄ໌ ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິປາຣາຊິກ ເມື່ອເຂົາບໍ່ເຂົ້າໃຈ ຕ້ອງອາບັຕິຖຸລລັຈຈັຍ

ຂັນຫຈັກຣ ທຸມູລກນັຍແຫ່ງອັຕຖຸວິສາຣກະ ຈົບ

ພັທຫຈັກຣ ທຸມູລກນັຍແຫ່ງອັຕຖຸວິສາຣກະ

ພິກຂຸຕ້ອງການຈະກ່າວວ່າ ຂ້າພະເຈົ້າເຂົ້າທຸຕິຍຍານແລະຕຕິຍຍານແລ້ວ ແຕ່ກ່າວເທັຈທັງທີ່ຮູ້ວ່າ ຂ້າພະເຈົ້າເຂົ້າຈຕຸຕຖຍານແລ້ວ ດ້ວຍອາການ ໓ ຢ່າງ ...ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິປາຣາຊິກ ເມື່ອເຂົາບໍ່ເຂົ້າໃຈ ຕ້ອງອາບັຕິຖຸລລັຈຈັຍ ฯລฯ

ພິກຂຸຕ້ອງການຈະກ່າວວ່າ ຂ້າພະເຈົ້າເຂົ້າທຸຕິຍຍານແລະຕຕິຍຍານແລ້ວ ແຕ່ກ່າວເທັຈທັງທີ່ຮູ້ວ່າ ຈິຕຂອງຂ້າພະເຈົ້າປອດຈາກໂມຫະ ດ້ວຍອາການ ໓ ຢ່າງ ...ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິປາຣາຊິກ ເມື່ອເຂົາບໍ່ເຂົ້າໃຈ ຕ້ອງອາບັຕິຖຸລລັຈຈັຍ ฯລฯ

ພິກຂຸຕ້ອງການຈະກ່າວວ່າ ຂ້າພະເຈົ້າເຂົ້າທຸຕິຍຍານແລະຕຕິຍຍານແລ້ວ ແຕ່ກ່າວເທັຈທັງທີ່ຮູ້ວ່າ ຂ້າພະເຈົ້າເຂົ້າປຖົມຍານແລ້ວ ດ້ວຍອາການ ໓ ຢ່າງ ฯລฯ ດ້ວຍອາການ ໗ ຢ່າງ ຄື ฯລฯ (໗) ອຳພາງຄວາມປະສົງຄ໌ ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິປາຣາຊິກ ເມື່ອເຂົາບໍ່ເຂົ້າໃຈ ຕ້ອງອາບັຕິຖຸລລັຈຈັຍ

ພັທຫຈັກຣ ທຸມູລກນັຍແຫ່ງອັຕຖຸວິສາຣກະ ຈົບ

ພັທຫຈັກຣ ທຸມູລກນັຍແຫ່ງອັຕຖຸວິສາຣກະ

ພິກສຸຕ້ອງການຈະກ່າວວ່າ ຈິຕຂອງຂ້າພະເຈົ້າປອດຈາກໂທສະ ແລະຈິຕຂອງຂ້າພະເຈົ້າປອດຈາກໂມຫະ ແຕ່ກ່າວເທັຈທັງທີ່ຮູ້ວ່າ ຂ້າພະເຈົ້າເຂົ້າປຖົມຢານແລ້ວ ດ້ວຍອາການ ໓ ຢ່າງ ...ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິປາຣາຊິກ ເມື່ອເຂົາບໍ່ເຂົ້າໃຈ ຕ້ອງອາບັຕິຖຸລລັຈຈັຍ ຯລຯ

ພິກສຸຕ້ອງການຈະກ່າວວ່າ ຈິຕຂອງຂ້າພະເຈົ້າປອດຈາກໂທສະ ແລະຈິຕຂອງຂ້າພະເຈົ້າປອດຈາກໂມຫະ ແຕ່ກ່າວເທັຈທັງທີ່ຮູ້ວ່າ ຈິຕຂອງຂ້າພະເຈົ້າປອດຈາກຣາຄະ ດ້ວຍອາການ ໓ ຢ່າງ ຯລຯ ດ້ວຍອາການ ໗ ຢ່າງ ຄື ຯລຯ (໗) ອຳພາງຄວາມປະສົງຄ໌ ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິປາຣາຊິກ ເມື່ອເຂົາບໍ່ເຂົ້າໃຈ ຕ້ອງອາບັຕິຖຸລລັຈຈັຍ

ພັທທຈັກຣ ທຸມູລກນັຍ ແຫ່ງອັຕຖຸອິສາຣກະທີ່ທ່ານຫຍໍ້ໄວ້ ຈົບ

ພັທທຈັກຣ ຕິມູລກນັຍກໍດີ ຈຕຸມູລກນັຍກໍດີ ປັຍຈມູລກນັຍກໍດີ ສມູລກນັຍກໍດີ ສັຕຕມູລກນັຍກໍດີ ອັຕຖມູລກນັຍກໍດີ ນວມູລກນັຍກໍດີ ທສມູລກນັຍກໍດີ ແຫ່ງອັຕຖຸອິສາຣກະບັນທິຕເພິ່ງຕັ້ງຂຍາຍໃຫ້ເຫມືອນ ພັທທຈັກຣແມ່ນທີ່ເປັນເອກມູລກນັຍແຫ່ງນິກເຂປບທທີ່ຂຍາຍໄວ້ແລ້ວ ເພິ່ງຂຍາຍໃຫ້ພິສດານເຫມືອນພັທທຈັກຣເອກມູລກນັຍທີ່ທ່ານຂຍາຍໃຫ້ພິສດານໄວ້ແລ້ວເຖີດ ຄຳທີ່ຈະກ່າວຕໍ່ໄປນີ້ເປັນພັທທຈັກຣ ສັພພມູລກນັຍ

[໔໑໗] ພິກສຸຕ້ອງການຈະກ່າວວ່າ ຂ້າພະເຈົ້າເຂົ້າປຖົມຢານ ທຸຕິຍຢານ ຕຕິຍຢານ ຈຕຸຕຖຢານ ສຸຍຍຕວິໂມກຂ໌ ອນິມິຕຕວິໂມກຂ໌ ອັປປນິຫິຕວິໂມກຂ໌ ສຸຍຍຕສມາທິ ອນິມິຕຕສມາທິ ອັປປນິຫິຕສມາທິ ສຸຍຍຕສມາບັຕິ ອນິມິຕຕສມາບັຕິ ອັປປນິຫິຕສມາບັຕິ ວິຊຊາ ໓ ສຕິປັຕຖານ ໔ ສັມມັປປທານ ໔ ອິທທິບາທ ໔ ອິນທຣິຍ໌ ໕ ພລະ ໕ ໂພຊຊັງຄ໌ ໗ ອຣິຍມັຄມີອົງຄ໌ ໘ ໂສດາປັຕຕິຜລ ສກທາຄາມິຜລ ອນາຄາມິຜລແລະອຣຫັຕຕຜົລແລ້ວ ຯລຯ ຂ້າພະເຈົ້າສລະຣາຄະແລ້ວ ຯລຯ ຂ້າພະເຈົ້າສລະໂທສະແລ້ວ ຯລຯ ຂ້າພະເຈົ້າສລະ ຄາຍພົ້ນ ລະ ສລັດ ເພີກ ຖອນໂມຫະຂຶ້ນແລ້ວ ຈິຕຂອງຂ້າພະເຈົ້າປອດຈາກຣາຄະແລະຈິຕຂອງຂ້າພະເຈົ້າປອດຈາກໂທສະ ແຕ່ກ່າວເທັຈທັງທີ່ຮູ້ວ່າ ຈິຕຂ້າພະເຈົ້າປອດຈາກໂມຫະ ດ້ວຍອາການ ໓ ຢ່າງ ຯລຯ ດ້ວຍອາການ ໗ ຢ່າງ ...ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິປາຣາຊິກ ເມື່ອເຂົາບໍ່ເຂົ້າໃຈ ຕ້ອງອາບັຕິຖຸລລັຈຈັຍ ຯລຯ

[໔໑໙] ພິກສຸຕ້ອງການຈະກ່າວວ່າ ຂ້າພະເຈົ້າເຂົ້າທຸຕິຍຍານ ຕະຕິຍຍານ ຈະຕຸດຖຍານ ສຸຍຍະຕະ ວິໂມກຂ໌ ອະນິມິຕຕະວິໂມກຂ໌ ອັປປະນິຫິຕະວິໂມກຂ໌ ສຸຍຍະຕະສະມາທິ ອະນິມິຕຕະສະມາທິ ອັປປະນິຫິຕະ ສະມາທິ ສຸຍຍະຕະສະມາບັຕິ ອະນິມິຕຕະສະມາບັຕິ ອັປປະນິຫິຕະສະມາບັຕິ ວິຊຊາ ໓ ສະຕິປັຕຖານ ໔ ສັມມັປປະທານ ໔ ອິທທິບາທ ໔ ອິນທຣິຍ໌ ໕ ພລະ ໕ ໂພຊຊົງຄ໌ ໗ ອະຣິຍະມັຄມີອົງຄ໌ ໘ ໂສດາ ປັຕຕິຜລ ສະກະທາຄາມິຜລ ອະນາຄາມິຜລແລະອະຣະຫັຕຕະຜົລ ຂ້າພະເຈົ້າສລະຣາຄະແລ້ວ ...ຂ້າພະເຈົ້າ ສລະໂທສະແລ້ວ ...ຂ້າພະເຈົ້າສລະ ຄາຍ ພົ້ນ ລະ ສລັດ ເພີກຖອນໂມຫະຂຶ້ນແລ້ວ ...ຈິຕຂອງຂ້າ ພະເຈົ້າປອດຈາກຣາຄະ ຈິຕຂອງຂ້າພະເຈົ້າປອດຈາກໂທສະ ຈິຕຂອງຂ້າພະເຈົ້າປອດຈາກໂມຫະ ແຕ່ກ່າວເທັຈທັງທີ່ຮູ້ວ່າ ຂ້າພະເຈົ້າເຂົ້າປະຖົມຍານແລ້ວ ດ້ວຍອາການ ໓ ຢ່າງ ...ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິປາຣາຊິກ ເມື່ອເຂົາບໍ່ເຂົ້າໃຈ ຕ້ອງອາບັຕິຖຸລລັຈຈັຍ ຯລຯ

ພິກສຸຕ້ອງການຈະກ່າວວ່າ ຂ້າພະເຈົ້າເຂົ້າຕະຕິຍຍານແລະຈະຕຸດຖຍານ ຯລຯ ແລະຈິຕຂອງຂ້າພະເຈົ້າ ປອດຈາກໂມຫະ ແລະຂ້າພະເຈົ້າເຂົ້າປະຖົມຍານແລ້ວ ແຕ່ກ່າວເທັຈທັງທີ່ຮູ້ວ່າຂ້າພະເຈົ້າເຂົ້າທຸຕິຍ ຍານແລ້ວ ດ້ວຍອາການ ໓ ຢ່າງ ...ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິປາຣາຊິກ ເມື່ອເຂົາບໍ່ເຂົ້າໃຈ ຕ້ອງອາບັຕິຖຸລລັຈຈັຍ ຯລຯ

ພິກສຸຕ້ອງການຈະກ່າວວ່າ ຈິຕຂອງຂ້າພະເຈົ້າປອດຈາກໂມຫະ ຂ້າພະເຈົ້າເຂົ້າປະຖົມຍານ ທຸຕິຍຍານ ຕະຕິຍຍານ ຈະຕຸດຖຍານ ຯລຯ ຈິຕຂອງຂ້າພະເຈົ້າປອດຈາກຣາຄະ ແຕ່ກ່າວເທັຈທັງທີ່ຮູ້ວ່າ ຈິຕຂອງ ຂ້າພະເຈົ້າປອດຈາກໂທສະ ດ້ວຍອາການ ໓ ຢ່າງ ຯລຯ ດ້ວຍອາການ ໗ ຢ່າງ ຄື (໑) ເບື້ອງຕົ້ນ ທ່ານຮູ້ວ່າ ຈັກກ່າວເທັຈ (໒) ກຳລັງກ່າວ ກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວ ກໍຮູ້ວ່າກ່າວ ເທັຈແລ້ວ (໔) ອຳພາງຄວາມເຫັນ (໕) ອຳພາງຄວາມເຫັນຊອບ (໖) ອຳພາງຄວາມພໍໃຈ (໗) ອຳພາງຄວາມປະສົງຄ໌ ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິປາຣາຊິກ ເມື່ອເຂົາບໍ່ເຂົ້າໃຈ ຕ້ອງອາບັຕິ ຖຸລລັຈຈັຍ

ພັທທຈັກຣ ສັພພມູລກນັຍແຫ່ງວັຕຖຸວິສາຣກະ ຈົບ

ຈັກຣເປຍຍາລແຫ່ງວັຕຖຸວິສາຣກະ ຈົບ

ວັຕຕຸການອາຣກຖາ ຈົບ

## ປັຈຈຍປຕິສັງຍຸຕຕວາຣກຖາ
## ເປຍຍາລ ໑໕ ຫມວດ

[໒໔໐] ພິກສຸກ່າວເທັຈທັງທີ່ຮູ້ວ່າ ພິກສຸຮູບໃດຢູ່ໃນວິຫາຣຂອງທ່ານ ພິກສຸຮູບນັ້ນເຂົ້າປຖົມຍານແລ້ວ ...ເຂົ້າຢູ່ ...ເປັນຜູ້ເຂົ້າແລ້ວ ...ພິກສຸຮູບນັ້ນເປັນຜູ້ໄດ້ປຖົມຍານ ...ເປັນຜູ້ຊຳນານ ...ພິກສຸຮູບນັ້ນທຳປຖົມຍານໃຫ້ແຈ້ງແລ້ວ ດ້ວຍອາການ ໓ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າ ຈັກກ່າວເທັຈ (໒) ກຳລັງກ່າວກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວ ກໍຮູ້ວ່າກ່າວເທັຈແລ້ວ ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິຖຸລລັຈຈັຍ ເມື່ອເຂົາບໍ່ເຂົ້າໃຈ ຕ້ອງອາບັຕິທຸກກຕ

ພິກສຸກ່າວເທັຈທັງທີ່ຮູ້ວ່າ ພິກສຸຮູບໃດຢູ່ໃນວິຫາຣຂອງທ່ານ ພິກສຸຮູບນັ້ນເຂົ້າປຖົມຍານແລ້ວ ...ເຂົ້າຢູ່ ...ເປັນຜູ້ເຂົ້າແລ້ວ ...ພິກສຸຮູບນັ້ນເປັນຜູ້ໄດ້ປຖົມຍານ ...ເປັນຜູ້ຊຳນານ ...ພິກສຸຮູບນັ້ນທຳປຖົມຍານໃຫ້ແຈ້ງແລ້ວ ດ້ວຍອາການ ໔ ຢ່າງ ฯລฯ ດ້ວຍອາການ ໕ ຢ່າງ ฯລฯ ດ້ວຍອາການ ໖ ຢ່າງ ฯລฯ ດ້ວຍອາການ ໗ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າ ຈັກກ່າວເທັຈ (໒) ກຳລັງກ່າວກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວ ກໍຮູ້ວ່າກ່າວເທັຈແລ້ວ (໔) ອຳພາງຄວາມເຫັນ (໕) ອຳພາງຄວາມເຫັນຊອບ (໖) ອຳພາງຄວາມພໍໃຈ (໗) ອຳພາງຄວາມປະສົງຄ໌ ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິຖຸລລັຈຈັຍ ເມື່ອເຂົາບໍ່ເຂົ້າໃຈ ຕ້ອງອາບັຕິທຸກກຕ

ພິກສຸກ່າວເທັຈທັງທີ່ຮູ້ວ່າ ພິກສຸຮູບໃດຢູ່ໃນວິຫາຣຂອງທ່ານ ພິກສຸຮູບນັ້ນເຂົ້າ ທຸຕິຍຍານ ຕຕິຍຍານ ຈຕຸຕຖຍານ ສຸຍຍຕວິໂມກຂ໌ ອນິມິຕຕວິໂມກຂ໌ ອັປປນິຫິຕວິໂມກຂ໌ ສຸຍຍຕສມາທິ ອນິມິຕຕສມາທິ ອັປປນິຫິຕສມາທິ ສຸຍຍຕສມາບັຕິ ອນິມິຕຕສມາບັຕິ ອັປປນິຫິຕສມາບັຕິ ວິຊຊາ ໓ ສຕິປັຕຖານ ໔ ສັມມັປປທານ ໔ ອິທທິບາທ ໔ ອິນທຣິຍ໌ ໕ ພລະ ໕ ໂພຊຍງຄ໌ ໗ ອຣິຍມັຄມີອົງຄ໌ ໘ ໂສດາປັຕຕິຜົລ ສກທາຄາມິຜົລ ອນາຄາມິຜົລແລະອຣຫັຕຕຜົລ ...ເຂົ້າຢູ່ ...ເປັນຜູ້ເຂົ້າແລ້ວ ...ພິກສຸຮູບນັ້ນເປັນຜູ້ໄດ້ອຣຫັຕຕຜົລ ...ເປັນຜູ້ຊຳນານ ...ພິກສຸຮູບນັ້ນທຳອຣຫັຕຕຜົລໃຫ້ແຈ້ງແລ້ວ ດ້ວຍອາການ ໓ ຢ່າງ ...ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິຖຸລລັຈຈັຍ ເມື່ອເຂົາບໍ່ເຂົ້າໃຈ ຕ້ອງອາບັຕິທຸກກຕ ฯລฯ

ພິກສຸກ່າວເທັຈທັງທີ່ຮູ້ວ່າ ພິກສຸຮູບໃດຢູ່ໃນວິຫາຣຂອງທ່ານ ພິກສຸຮູບນັ້ນສລະຣາຄະແລ້ວ ຯລຯ ສລະໂມຫະແລ້ວ ຯລຯ ສລະ ຄາຍ ພົ້ນ ລະ ສລັດ ເພີກ ຖອນໂມຫະຂຶ້ນແລ້ວ ດ້ວຍອາການ ໓ ຢ່າງ ...ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິຖຸລລັຈຈັຍ ເມື່ອເຂົາບໍ່ເຂົ້າໃຈ ຕ້ອງອາບັຕິທຸກກຕ ຯລຯ

ພິກສຸກ່າວເທັຈທັງທີ່ຮູ້ວ່າ ພິກສຸຮູບໃດຢູ່ໃນວິຫາຣຂອງທ່ານ ຈິຕຂອງພິກສຸຮູບນັ້ນປອດຈາກຣາຄະ ...ຈາກໂທສະ ...ຈິຕປອດຈາກໂມຫະ ດ້ວຍອາການ ໓ ຢ່າງ ຯລຯ ດ້ວຍອາການ ໗ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າ ຈັກກ່າວເທັຈ (໒) ກຳລັງກ່າວ ກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວ ກໍຮູ້ວ່າກ່າວເທັຈແລ້ວ (໔) ອຳພາງຄວາມເຫັນ (໕) ອຳພາງຄວາມເຫັນຊອບ (໖) ອຳພາງຄວາມພໍໃຈ (໗) ອຳພາງຄວາມປະສົງຄ໌ ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິຖຸລລັຈຈັຍ ເມື່ອເຂົາບໍ່ເຂົ້າໃຈ ຕ້ອງອາບັຕິທຸກກຕ

ພິກສຸກ່າວເທັຈທັງທີ່ຮູ້ວ່າ ພິກສຸຮູບໃດຢູ່ໃນວິຫາຣຂອງທ່ານ ພິກສຸຮູບນັ້ນເຂົ້າ ປຖົມຢານ ທຸຕິຍຢານ ຕຕິຍຢານ ຈຕຸຕຖຢານ ໃນເຮືອນວ່າງແລ້ວ ...ເຂົ້າຢູ່ ...ເປັນຜູ້ເຂົ້າແລ້ວ ...ພິກສຸຮູບນັ້ນເປັນຜູ້ໄດ້ຈຕຸຕຖຢານໃນເຮືອນວ່າງ ...ເປັນຜູ້ຊຳນານ ...ພິກສຸຮູບນັ້ນທຳຈຕຸຕຖຢານໃຫ້ແຈ້ງແລ້ວ ດ້ວຍອາການ ໓ ຢ່າງ ຯລຯ ດ້ວຍອາການ ໗ ຄື (໑) ເບື້ອງຕົ້ນ ທ່ານຮູ້ວ່າ ຈັກກ່າວເທັຈ (໒) ກຳລັງກ່າວ ກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວ
ແລ້ວ ກໍຮູ້ວ່າກ່າວເທັຈແລ້ວ (໔) ອຳພາງຄວາມເຫັນ (໕) ອຳພາງຄວາມເຫັນຊອບ (໖) ອຳພາງຄວາມພໍໃຈ (໗) ອຳພາງຄວາມປະສົງຄ໌ ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິຖຸລລັຈຈັຍ ເມື່ອເຂົາບໍ່ເຂົ້າໃຈ ຕ້ອງອາບັຕິທຸກກຕ
ແມ່ນທີ່ເຫລືອກໍເພິງຂຍາຍໃຫ້ພິສດາຣເຫມືອນກັບທີ່ໄດ້ຂຍາຍມານີ້

[໒໒໑] ພິກສຸກ່າວເທັຈທັງທີ່ຮູ້ວ່າ ພິກສຸຮູບໃດໃຊ້ສອຍຈີວອນຂອງທ່ານ ພິກສຸຮູບໃດສັນບິນທບາຕຂອງທ່ານ ພິກສຸຮູບໃດໃຊ້ສອຍເສນາສນະຂອງທ່ານ ພິກສຸຮູບໃດບໍຣິໂພຄຄິລານປັຈຈັຍເພສັຊບໍຣິຂາຣຂອງທ່ານ ວິຫາຣຂອງທ່ານພິກສຸຮູບໃດໃຊ້ສອຍແລ້ວ ຈີວອນຂອງທ່ານພິກສຸຮູບໃດໃຊ້ສອຍແລ້ວ ບິນທບາຕຂອງທ່ານພິກສຸຮູບໃດສັນແລ້ວ ເສນາສນະຂອງທ່ານພິກສຸຮູບໃດໃຊ້ສອຍແລ້ວ ຄິລານປັຈຈັຍເພສັຊບໍຣິຂາຣຂອງທ່ານພິກສຸຮູບໃດບໍຣິໂພຄແລ້ວ ທ່ານອາສັຍພິກສຸຮູບໃດແລ້ວໄດ້ຖວາຍວິຫາຣ ໄດ້ຖວາຍຈີວອນ ໄດ້ຖວາຍບິນທບາຕ ໄດ້ຖວາຍເສນາສນະ ໄດ້ຖວາຍຄິລານປັຈຈັຍເພສັຊບໍຣິຂາຣ ພິກສຸຮູບນັ້ນ ເຂົ້າປຖົມຢານ ທຸຕິຍຢານ ຕຕິຍຢານ ຈຕຸຕຖ

ຝານ ໃນເຮືອນວ່າງ ...ເຂົ້າຢູ່ ...ເປັນຜູ້ເຂົ້າແລ້ວ ...ພິກສຸຮູບນັ້ນເປັນຜູ້ໄດ້ ຈຕຸຕຖຝານ ໃນເຮືອນວ່າງ ...ເປັນຜູ້ຊຳນານ ...ພິກສຸຮູບນັ້ນທຳຈຕຸຕຖຝານໃຫ້ແຈ້ງແລ້ວໃນເຮືອນວ່າງ ຯລຯ ດ້ວຍອາການ ໓ ຢ່າງ ...໗ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າ ຈັກກ່າວເທັຈ (໒) ກຳລັງກ່າວ ກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວ ກໍຮູ້ວ່າກ່າວເທັຈແລ້ວ (໔) ອຳພາງຄວາມເຫັນ (໕) ອຳພາງຄວາມເຫັນຊອບ (໖) ອຳພາງຄວາມພໍໃຈ (໗) ອຳພາງຄວາມປະສົງຄ໌ ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິຖຸລລັຈຈັຍ ເມື່ອເຂົາບໍ່ເຂົ້າໃຈ ຕ້ອງອາບັຕິທຸກກຕ

ເປຍຍາລ ໑໕ ຫມວດ ຈົບ

ປັຈຈັຍປຕິສັງຍຸຕຕວາຣກຖາ ຈົບ

ອຸຕຕຣິມນຸສສທັມຈັກຣເປຍຍາລ ຈົບ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໒໒໒] ໑. ພິກສຸຜູ້ສຳຄັນວ່າໄດ້ບັນລຸ

໒. ພິກສຸຜູ້ບໍ່ມີຄວາມປະສົງຄ໌ຈະກ່າວອວດ

໓. ພິກສຸວິກົລຈິຕ

໔. ພິກສຸຜູ້ມີຈິຕປັ່ນປ່ວງ

໕. ພິກສຸກະວົນກະວາຍເພາະເວທນາ

໖. ພິກສຸຜູ້ເປັນຕົ້ນບັນຍັຕ

ພຣະວິນັຍປິດົກ ມຫາວິພັງຄ໌ [໑. ປາຣາຊິກກັນຫ໌] ປາຣາຊິກສິກຂາບົທທີ ໔ ຄາຖາຣວມວິນີຕວັຕຖຸ

ຄາຖາຣວມວິນີຕວັຕຖຸ

ເຣື້ອງທີ່ຊົງວິນິຈສັຍແລ້ວ

ເຣື້ອງພິກສຸສຳຄັນວ່າໄດ້ບັນລຸ ໑ ເຣື້ອງ □ເຣື້ອງຢູ່ປ່າ ໑ ເຣື້ອງ □ເຣື້ອງທຽວບິນຫບາຕ ໑ ເຣື້ອງ □ເຣື້ອງພຣະອຸປັຊຢາຍ໌ ໔ ເຣື້ອງ □ເຣື້ອງອິຣິຍາບົຖ ໔ ເຣື້ອງ □ເຣື້ອງລະສັງໂຍຊນ໌ ໑ ເຣື້ອງ □ເຣື້ອງຫັມໃນທີ່ລັບ ໔ ເຣື້ອງ □ເຣື້ອງພິກສຸຜູ້ຢູ່ໃນວິຫາຣ ໑ ເຣື້ອງ □ເຣື້ອງພິກສຸຜູ້ໄດ້ຮັບການບຳຣຸງ ໑ ເຣື້ອງ □ເຣື້ອງທຳບໍ່ຍາກ ໑ ເຣື້ອງ □ເຣື້ອງຄວາມພຽນ ໑ ເຣື້ອງ □ເຣື້ອງບໍ່ຢ້ານຄວາມຕາຍ ໑ ເຣື້ອງ □ເຣື້ອງຄວາມຮ້ອນໃຈ ໑ ເຣື້ອງ □ເຣື້ອງຄວາມປະກອບຖືກຕ້ອງ ໑ ເຣື້ອງ □ເຣື້ອງປາຣິພຄວາມພຽນ ໑ ເຣື້ອງ □ເຣື້ອງປະກອບຄວາມພຽນ ໑ ເຣື້ອງ □ເຣື້ອງອົດກັ້ນເວທນາ ໔ ເຣື້ອງ □ເຣື້ອງພຣາມນ໌ ໕ ເຣື້ອງ □ເຣື້ອງພຍາກອນມັຄຜົລ ໖ ເຣື້ອງ □ເຣື້ອງຢູ່ຄອງເຮືອນ ໑ ເຣື້ອງ □ເຣື້ອງຫ້າມການ ໑ ເຣື້ອງ □ເຣື້ອງຄວາມຍິນດີ ໑ ເຣື້ອງ □ເຣື້ອງຫລີກໄປ ໑ ເຣື້ອງ □ເຣື້ອງອັຕຖິກສັງຂລິກເຜດ ໑ ເຣື້ອງ □ເຣື້ອງມັງສເປສີເຜດ ໑ ເຣື້ອງ □ເຣື້ອງມັງສປິນຫເຜດ ໑ ເຣື້ອງ □ເຣື້ອງນິຈສວິເຜດເພສຊາຍ ໑ ເຣື້ອງ □ເຣື້ອງອສິໂລມເຜດເພສຊາຍ ໑ ເຣື້ອງ □ເຣື້ອງສັຕຕິໂລມເຜດເພສຊາຍ ໑ ເຣື້ອງ □ເຣື້ອງອຸສຸໂລມເຜດເພສຊາຍ ໑ ເຣື້ອງ □ເຣື້ອງສູຈິໂລມເຜດເພສຊາຍ ໑ ເຣື້ອງ □ເຣື້ອງກຸມພັນຫເຜດ ໑ ເຣື້ອງ □ເຣື້ອງສູຈກເຜດເພສຊາຍ ໑ ເຣື້ອງ □ເຣື້ອງເຜດຈມຫລຸມຄູຖເພສຊາຍ ໑ ເຣື້ອງ □ເຣື້ອງເຜດກິນຄູຖເພສຊາຍ ໑ ເຣື້ອງ □ເຣື້ອງນິຈສວິເຜດເພສຍິງ ໑ ເຣື້ອງ □ເຣື້ອງມັງຄຸລິເຜດເພສຍິງ ໑ ເຣື້ອງ □ເຣື້ອງໂອກິຣິນີເຜດເພສຍິງ ໑ ເຣື້ອງ □ເຣື້ອງກພັນຫເຜດ ໑ ເຣື້ອງ □ເຣື້ອງນັກບວຊທຳກັມຊົ່ວໃນສາສນາຂອງພຣະພຸທຫເຈົ້າກັສສປະ ໕ ເຣື້ອງ ຄື □ເຣື້ອງເຜດມີຮູບເປັນພິກສຸ ໑ ເຣື້ອງ □ເຣື້ອງເຜດມີຮູບເປັນພິກສຸນີ ໑ ເຣື້ອງ □ເຣື້ອງເຜດມີຮູບເປັນສິກຂມານາ ໑ ເຣື້ອງ □ເຣື້ອງເຜດມີຮູບເປັນສາມເນຣ ໑ ເຣື້ອງ □ເຣື້ອງເຜດມີຮູບເປັນສາມເນຣີ ໑ ເຣື້ອງ □ເຣື້ອງແມ່ນ້ຳຕໄປທາ ໑ ເຣື້ອງ □ເຣື້ອງການສູ້ຣົບໃນກຸງຣາຊຄຶຫ໌ ໑ ເຣື້ອງ □ເຣື້ອງໄດ້ຍິນສຽງຊ້າງລົງນ້ຳ ໑ ເຣື້ອງ □ເຣື້ອງພຣະອຣຫັນຕ໌ໄສພິຕະຣະນຶກຊາຕິໄດ້ ໕໐໐ ກັປ ໑ ເຣື້ອງ

## ວິນີຕວັຕຖຸ

## ເຣື້ອງພິກສຸສຳຄັນວ່າໄດ້ບັນລຸ ໑ ເຣື້ອງ

[໔໔໖] ສມັຍນັ້ນ ພິກສຸຮູບນຶ່ງປະກາດວ່າໄດ້ອຣຫັຕຕຜົລເພາະສຳຄັນວ່າໄດ້ບັນລຸ ທ່ານເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຣົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງ

ນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິ ເພາະສຳຄັນວ່າໄດ້ບັນລຸ" (ເຣື້ອງທີ ໑)

## ເຣື້ອງຢູ່ປ່າ ໑ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງປຣາຖນາວ່າ ປະຊາຊົນຈັກຍົກຍ້ອງເຮົາຢ່າງນີ້ຈຶ່ງຢູ່ປ່າ ປະຊາຊົນກໍຍົກຍ້ອງທ່ານ ທ່ານເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ອີກຢ່າງນຶ່ງ ພິກສຸທັງຫລາຍ ພິກສຸບໍ່ເພິງຢູ່ປ່າດ້ວຍປຣາຖນາວ່າຈະໄດ້ຮັບຄຳຍົກຍ້ອງ ພິກສຸໃດຢູ່ປ່າດ້ວຍປຣາຖນາຢ່າງນັ້ນ ພິກສຸນັ້ນຕ້ອງອາບັຕິທຸກກຕ" (ເຣື້ອງທີ ໔)

## ເຣື້ອງທຽວບິນທບາຕ ໑ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງປຣາຖນາວ່າ ປະຊາຊົນຈັກຍົກຍ້ອງເຮົາຢ່າງນີ້ຈຶ່ງທຽວບິນທບາຕ ປະຊາຊົນກໍຍົກຍ້ອງທ່ານ ທ່ານເກີດຄວາມກັງວົລໃຈວ່າ ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ແລ້ວ ເຮົາຕ້ອງອາບັຕິປາຣາຊິກ ຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ອີກຢ່າງນຶ່ງ ພິກສຸທັງຫລາຍ ພິກສຸບໍ່ເພິງທຽວບິນທບາຕດ້ວຍປຣາຖນາວ່າຈະໄດ້ຮັບຄຳຍົກຍ້ອງ ພິກສຸໃດທຽວບິນທບາຕດ້ວຍປຣາຖນາຢ່າງນັ້ນ ພິກສຸນັ້ນຕ້ອງອາບັຕິທຸກກຕ" (ເຣື້ອງທີ ໕)

## ເຣື້ອງພຣະອຸປັຊຢາຍ໌ ໔ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງບອກພິກສຸອີກຮູບນຶ່ງວ່າ "ພວກພິກສຸສັທທິວິຫາຣິກຂອງພຣະອຸປັຊຢາຍ໌ຂອງພວກເຮົາ ລ້ວນເປັນພຣະອຣຫັນຕ໌" ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ" "ຂ້າພຣະພຸທທເຈົ້າມີຄວາມປະສົງຄ໌ຈະກ່າວອວດພຣະພຸທທເຈົ້າຂ້າ" "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ" (ເຣື້ອງທີ ໔)

ສມັຍນັ້ນ ພິກສຸຮູບນຶ່ງບອກພິກສຸອີກຮູບນຶ່ງວ່າ "ພວກພິກສຸອັນເຕວາສີກຂອງພຣະອຸປັຊຍາຍ໌ຂອງພວກເຮົາລ້ວນມີຮືຫຫານຸພາພມາກ" ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ" "ຂ້າພຣະພຸທທເຈົ້າມີຄວາມປະສົງຄ໌ຈະກ່າວອວດ ພຣະພຸທທເຈົ້າຂ້າ" "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈ ຈັຍ" (ເຣື້ອງທີ ໕)

## ເຣື້ອງອິຣິຍາບົຖ ໔ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງປຣາຖນາວ່າ ປະຊາຊົນຈັກຍົກຍ້ອງເຮົາຢ່າງນີ້ຈຶ່ງເດີນຈົງກົມ ປະຊາຊົນກໍຍົກຍ້ອງທ່ານ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ອີກຢ່າງນຶ່ງ ພິກສຸທັງຫລາຍ ພິກສຸບໍ່ເພິງເດີນຈົງກົມ ດ້ວຍປຣາຖນາຢ່າງນັ້ນ ພິກສຸໃດເດີນຈົງກົມ ດ້ວຍປຣາຖນາຢ່າງນັ້ນ ພິກສຸນັ້ນຕ້ອງອາບັຕິທຸກກຕ" (ເຣື້ອງທີ ໖)

ສມັຍນັ້ນ ພິກສຸຮູບນຶ່ງປຣາຖນາວ່າ ປະຊາຊົນຈັກຍົກຍ້ອງເຮົາຢ່າງນີ້ຈຶ່ງຢືນ ປະຊາຊົນກໍຍົກຍ້ອງທ່ານ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ອີກຢ່າງນຶ່ງ ພິກສຸທັງຫລາຍ ພິກສຸບໍ່ເພິງຢືນດ້ວຍປຣາຖນາຢ່າງນັ້ນ ພິກສຸໃດຢືນດ້ວຍປຣາຖນາຢ່າງນັ້ນ ພິກສຸນັ້ນຕ້ອງອາບັຕິທຸກກຕ" (ເຣື້ອງທີ ໗)

ສມັຍນັ້ນ ພິກສຸຮູບນຶ່ງປຣາຖນາວ່າ ປະຊາຊົນຈັກຍົກຍ້ອງເຮົາຢ່າງນີ້ຈຶ່ງນັ່ງ ປະຊາຊົນກໍຍົກຍ້ອງທ່ານ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ອີກຢ່າງນຶ່ງ ພິກສຸທັງຫລາຍ ພິກສຸບໍ່ເພິງນັ່ງດ້ວຍປຣາຖນາຢ່າງນັ້ນ ພິກສຸໃດນັ່ງດ້ວຍປຣາຖນາຢ່າງນັ້ນ ພິກສຸນັ້ນຕ້ອງອາບັຕິທຸກກຕ" (ເຣື້ອງທີ ໘)

ສມັຍນັ້ນ ພິກສຸຮູບນຶ່ງປຣາຖນາວ່າ ປະຊາຊົນຈັກຍົກຍ້ອງເຮົາຢ່າງນີ້ ຈຶ່ງນອນ ປະຊາຊົນກໍຍົກຍ້ອງທ່ານ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ອີກຢ່າງນຶ່ງ

ພິກສຸທັງຫລາຍ ພິກສຸບໍ່ເພີງນອນດ້ວຍປຣາຖນາຢ່າງນັ້ນ ພິກສຸໃດນອນດ້ວຍປຣາຖນາຢ່າງນັ້ນ ພິກສຸນັ້ນຕ້ອງອາບັຕິທຸກກຕ" (ເຣື່ອງທີ ໙)

## ເຣື້ອງລະສັງໂຍຊນ໌ ໑ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງກ່າວອວດອຸຕຕຣິມນຸສສທັມແກ່ພິກສຸອີກຮູບນຶ່ງ ແມ່ນພິກສຸຮູບນັ້ນກໍກ່າວອວດວ່າ "ແມ່ນຜູ້ຂ້າກໍລະສັງໂຍຊນ໌ໄດ້" ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລແດ່ພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໑໐)

## ເຣື້ອງທັມໃນທີ່ລັບ ໔ ເຣື້ອງ

[໔໔໔] ສມັຍນັ້ນ ພິກສຸຮູບນຶ່ງຢູ່ໃນທີ່ສງັດ ກ່າວອວດອຸຕຕຣິມນຸສສທັມ ພິກສຸຜູ້ຮູ້ຄວາມຄິດຂອງຜູ້ອື່ນຮູບນຶ່ງຕັກເຕືອນທ່ານວ່າ "ທ່ານຢ່າກ່າວຢ່າງນັ້ນ ເພາະທ່ານບໍ່ມີທັມເຊັ່ນນັ້ນ" ພິກສຸຮູບນັ້ນເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິທຸກກຕ" (ເຣື້ອງທີ ໑໑)

ສມັຍນັ້ນ ພິກສຸອີກຮູບນຶ່ງຢູ່ໃນທີ່ສງັດ ກ່າວອວດອຸຕຕຣິມນຸສສທັມ ເທພດາຕັກເຕືອນທ່ານວ່າ "ພຣະຄຸນເຈົ້າ ພຣະຄຸນເຈົ້າຢ່າກ່າວຢ່າງນັ້ນ ເພາະພຣະຄຸນເຈົ້າບໍ່ມີທັມຢ່າງນັ້ນ" ພິກສຸຮູບນັ້ນເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງອາບັຕິທຸກກຕ" (ເຣື້ອງທີ ໑໔)

## ເຣື້ອງພິກສຸຜູ້ຢູ່ໃນວິຫາຣ ໑ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງບອກອຸບາສິກຄົນນຶ່ງວ່າ "ອຸບາສິກ ພິກສຸຮູບທີ່ຢູ່ໃນວິຫາຣຂອງທ່ານເປັນພຣະອຣຫັນຕ໌" ແລະຕົວທ່ານກໍຢູ່ໃນວິຫາຣຂອງອຸບາສິກນັ້ນ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ" "ຂ້າພຣະພຸທທເຈົ້າມີຄວາມປະສົງຄ໌ຈະກ່າວອວດ ພຣະ

ພຸທທຸເຈົ້າຂ້າ" "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງ
ອາບັຕິຖຸລລັຈຈັຍ" (ເຣື່ອງທີ ໑໓)

## ເຣື້ອງພິກສຸຜູ້ໄດ້ຮັບການບຳຣຸງ ໑ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງບອກອຸບາສິກຄົນນຶ່ງວ່າ "ອຸບາສິກ ພິກສຸຮູບທີ່ທ່ານບຳຣຸງດ້ວຍຈີວອນ ບິນທຸບາຕ ເສນາສນະແລະຄິລານປັຈຈັຍເພສັຊບໍຣິຂາຣນັ້ນ ເປັນພຣະອຣຫັນຕ໌" ແລະອຸບາສິກ ກໍ ບຳຣຸງພິກສຸນັ້ນຢູ່ດ້ວຍຈີວອນ ບິນທຸບາຕ ເສນາສນະແລະຄິລານປັຈຈັຍເພສັຊ ບໍຣິຂາຣ ພິກສຸນັ້ນ ເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະ ພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ" "ຂ້າພຣະພຸທທຸເຈົ້າມີຄວາມ ປະສົງຄ໌ຈະກ່າວອວດ ພຣະພຸທທຸເຈົ້າຂ້າ" "ພິກສຸ ທ່ານບໍ່ຕ້ອງ
ອາບັຕິປາຣາຊິກ ແຕ່ຕ້ອງອາບັຕິຖຸລລັຈຈັຍ" (ເຣື່ອງທີ ໑໔)

## ເຣື້ອງທຳບໍ່ຍາກ ໑ ເຣື້ອງ

[໒໔໕] ສມັຍນັ້ນ ພິກສຸຮູບນຶ່ງອາພາທ ພິກສຸທັງຫລາຍຖາມທ່ານວ່າ "ທ່ານມີອຸຕຕຣິມ ນຸສສທັມຢູ່ຫລື" ທ່ານຕອບວ່າ "ການບັນລຸອຣຫັຕຕຜົລເຮັດໄດ້ບໍ່ຍາກ" ທ່ານເກີດຄວາມກັງວົລໃຈ ວ່າ ສະເພາະພຣະອຣິຍສາວົກຂອງພຣະຜູ້ມີພຣະພາຄເທົ່ານັ້ນທີ່ຄວຣກ່າວຢ່າງນັ້ນ ແຕ່ເຮົາບໍ່ໄດ້ເປັນ ສາວົກຂອງພຣະຜູ້ມີພຣະພາຄດ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີ ພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ" "ຂ້າພຣະພຸທທຸເຈົ້າ ບໍ່ມີ ຄວາມປະສົງຄ໌ຈະກ່າວອວດ ພຣະພຸທທຸເຈົ້າຂ້າ" "ພິກສຸ ທ່ານບໍ່ມີຄວາມປະສົງຄ໌ຈະກ່າວອວດ ບໍ່ ຕ້ອງອາບັຕິ" (ເຣື່ອງທີ ໑໕)

## ເຣື້ອງຄວາມພຽນ ໑ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງອາພາທ ພິກສຸທັງຫລາຍຖາມທ່ານວ່າ "ທ່ານມີອຸຕຕຣິມນຸສສທັມຫລື" ທ່ານ ຕອບວ່າ "ທ່ານທັງຫລາຍ ທ່ານຜູ້ບຳເພັນພຽນແລ້ວສາມາດຈະມີທັມໄດ້" ທ່ານເກີດຄວາມກັງວົລ ໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ມີຄວາມປະສົງຄ໌ຈະກ່າວອວດ ບໍ່ຕ້ອງອາບັຕິ" (ເຣື່ອງທີ ໑໖)

## ເຣື້ອງບໍ່ຢ້ານຄວາມຕາຍ ໑ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງອາພາຫ ພິກສຸທັງຫລາຍກ່າວກັບທ່ານວ່າ “ທ່ານຢ່າຢ້ານເລີຍ” ທ່ານຕອບວ່າ “ທ່ານທັງຫລາຍ ຜູ້ຂ້າບໍ່ຢ້ານຕາຍ” ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ “ພິກສຸ ທ່ານບໍ່ມີຄວາມປະສົງຄ໌ຈະກ່າວອວດ ບໍ່ຕ້ອງອາ ບັຕິ” (ເຣື້ອງທີ ໑໗)

## ເຣື້ອງຄວາມຮ້ອນໃຈ ໑ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງອາພາຫ ພິກສຸທັງຫລາຍກ່າວກັບທ່ານວ່າ “ທ່ານຢ່າຢ້ານເລີຍ” ທ່ານຕອບວ່າ “ທ່ານທັງຫລາຍ ຜູ້ມີຄວາມຮ້ອນໃຈຈະຕ້ອງຢ້ານແນ່” ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ “ພິກສຸ ທ່ານບໍ່ມີຄວາມປະສົງຄ໌ຈະກ່າວ ອວດ ບໍ່ຕ້ອງອາບັຕິ” (ເຣື້ອງທີ ໑໘)

## ເຣື້ອງຄວາມປະກອບຖືກຕ້ອງ ໑ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງອາພາຫ ພິກສຸທັງຫລາຍຖາມທ່ານວ່າ “ທ່ານມີອຸຕຕຣິມນຸສສທັມຫລື” ທ່ານຕອບວ່າ “ທ່ານທັງຫລາຍ ຜູ້ປະກອບຖືກຕ້ອງ ສາມາດຈະມີທັມໄດ້” ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ “ພິກສຸ ທ່ານບໍ່ມີຄວາມປະສົງຄ໌ຈະກ່າວອວດ ບໍ່ຕ້ອງອາບັຕິ” (ເຣື້ອງທີ ໑໙)

## ເຣື້ອງປາຣົພຄວາມພຽນ ໑ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງອາພາຫ ພິກສຸທັງຫລາຍຖາມທ່ານວ່າ “ທ່ານມີອຸຕຕຣິມນຸສສທັມຫລື” ທ່ານຕອບວ່າ “ທ່ານທັງຫລາຍ ຜູ້ປາຣົພຄວາມພຽນແລ້ວ ສາມາດຈະມີທັມໄດ້” ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ “ພິກສຸ ທ່ານບໍ່ມີຄວາມປະສົງຄ໌ຈະກ່າວອວດ ບໍ່ຕ້ອງອາບັຕິ” (ເຣື້ອງທີ ໒໐)

## ເຣື້ອງປະກອບຄວາມພຽນ ໑ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງອາພາທ ພິກສຸທັງຫລາຍຖາມທ່ານວ່າ "ທ່ານມີອຸຕຕຣິມນຸສສທັມຫລື" ທ່ານຕອບວ່າ "ທ່ານທັງຫລາຍ ຜູ້ປະກອບຄວາມພຽນແລ້ວ ສາມາດຈະມີທັມໄດ້" ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ມີຄວາມປະສົງຄ໌ຈະກ່າວອວດ ບໍ່ຕ້ອງອາບັຕິ" (ເຣື່ອງທີ ໔໑)

## ເຣື່ອງອົດກັ້ນເວທນາ ໔ ເຣື່ອງ

ສມັຍນັ້ນ ພິກສຸຮູບນຶ່ງອາພາທ ພິກສຸທັງຫລາຍຖາມທ່ານວ່າ "ທ່ານຍັງສະບາຍດີຫລື ຍັງພໍເປັນຢູ່ໄດ້ຫລື" ທ່ານຕອບວ່າ "ຄນທົ່ວໄປບໍ່ສາມາດອົດກັ້ນໄດ້" ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກ ຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ມີຄວາມປະສົງຄ໌ຈະກ່າວອວດ ບໍ່ຕ້ອງອາບັຕິ" (ເຣື່ອງທີ ໔໒)

ສມັຍນັ້ນ ພິກສຸຮູບນຶ່ງອາພາທ ພິກສຸທັງຫລາຍຖາມທ່ານວ່າ "ທ່ານຍັງສະບາຍດີຫລືຍັງ ພໍເປັນຢູ່ໄດ້ຫລື" ທ່ານຕອບວ່າ ປຸຖຸຊົນບໍ່ສາມາດອົດກັ້ນໄດ້ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ" "ຂ້າພຣະພຸທທເຈົ້າບໍ່ມີຄວາມປະສົງຄ໌ຈະກ່າວອວດ ພຣະພຸທທເຈົ້າຂ້າ" "ພິກສຸ ທ່ານບໍ່ຕ້ອງອາບັຕິປາຣາຊິກ ແຕ່ຕ້ອງ
ອາບັຕິຖຸລລັຈຈັຍ" (ເຣື່ອງທີ ໔໓)

## ເຣື່ອງພຣາມນ໌ ໕ ເຣື່ອງ

[໔໔໓] ສມັຍນັ້ນ ພຣາມນ໌ຄົນນຶ່ງນິມົນຕ໌ພິກສຸທັງຫລາຍມາກ່າວວ່າ "ນິມົນຕ໌ພຣະອຣຫັນຕ໌ທັງຫລາຍມາເຖີດຂນ້ອຍ" ພິກສຸເຫລົ່ານັ້ນເກີດຄວາມກັງວົລໃຈວ່າ ພວກເຮົາບໍ່ແມ່ນພຣະອຣຫັນຕ໌ ແຕ່ພຣາມນ໌ນີ້ຮຽກພວກເຮົາວ່າ ພຣະອຣຫັນຕ໌ ພວກເຮົາເພິ່ງປະຕິບັດຢ່າງໃດດີ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ພວກທ່ານບໍ່ຕ້ອງອາບັຕິ ເພາະເຂົາຮຽກດ້ວຍຄວາມເຫລື້ອມໃສ" (ເຣື່ອງທີ ໔໔)

ສມັຍນັ້ນ ພຣາມນ໌ຄົນນຶ່ງນິມົນຕ໌ພິກສຸທັງຫລາຍມາກ່າວວ່າ "ນິມົນຕ໌ພຣະອຣຫັນຕ໌ທັງຫລາຍນັ່ງເຖິດຂນ້ອຍ" ພິກສຸເຫລົ່ານັ້ນເກີດຄວາມກັງວົລໃຈວ່າ ພວກເຮົາບໍ່ແມ່ນພຣະອຣຫັນຕ໌ ແຕ່ພຣາມນ໌ຮຽກພວກເຮົາວ່າພຣະອຣຫັນຕ໌ ພວກເຮົາເພິງປະຕິບັດຢ່າງໃດດີ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ພວກທ່ານບໍ່ຕ້ອງອາບັຕິ ເພາະເຂົາຮຽກດ້ວຍຄວາມເຫລື້ອມໃສ" (ເຣື່ອງທີ ໔໕)

ສມັຍນັ້ນ ພຣາມນ໌ຄົນນຶ່ງນິມົນຕ໌ພິກສຸທັງຫລາຍມາກ່າວວ່າ "ນິມົນຕ໌ພຣະອຣຫັນຕ໌ທັງຫລາຍສົນເຖິດຂນ້ອຍ" ພິກສຸເຫລົ່ານັ້ນເກີດຄວາມກັງວົລໃຈວ່າ ພວກເຮົາບໍ່ແມ່ນພຣະອຣຫັນຕ໌ແຕ່ພຣາມນ໌ຮຽກພວກເຮົາວ່າພຣະອຣຫັນຕ໌ ພວກເຮົາເພິງປະຕິບັດຢ່າງໃດດີ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ພວກທ່ານບໍ່ຕ້ອງອາບັຕິ ເພາະເຂົາຮຽກດ້ວຍຄວາມເຫລື້ອມໃສ" (ເຣື້ອງທີ ໔໖)

ສມັຍນັ້ນ ພຣາມນ໌ຄົນນຶ່ງນິມົນຕ໌ພິກສຸທັງຫລາຍມາກ່າວວ່າ "ນິມົນຕ໌ພຣະອຣຫັນຕ໌ທັງຫລາຍສົນໃຫ້ອິ່ມຫນຳເຖິດຂນ້ອຍ" ພິກສຸເຫລົ່ານັ້ນເກີດຄວາມກັງວົລໃຈວ່າພວກເຮົາບໍ່ແມ່ນພຣະອຣຫັນຕ໌ແຕ່ພຣາມນ໌ຮຽກພວກເຮົາວ່າພຣະອຣຫັນຕ໌ ພວກເຮົາເພິງປະຕິບັດຢ່າງໃດດີ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ພວກທ່ານບໍ່ຕ້ອງອາບັຕິເພາະເຂົາຮຽກດ້ວຍຄວາມເຫລື້ອມໃສ" (ເຣື່ອງທີ ໔໗)

ສມັຍນັ້ນ ພຣາມນ໌ຄົນນຶ່ງນິມົນຕ໌ພິກສຸທັງຫລາຍມາກ່າວວ່າ "ນິມົນຕ໌ພຣະອຣຫັນຕ໌ທັງຫລາຍກັບເຖິດຂນ້ອຍ" ພິກສຸເຫລົ່ານັ້ນເກີດຄວາມກັງວົລໃຈວ່າ ພວກເຮົາບໍ່ແມ່ນພຣະອຣຫັນຕ໌ ແຕ່ພຣາມນ໌ຮຽກພວກເຮົາວ່າພຣະອຣຫັນຕ໌ ພວກເຮົາເພິງປະຕິບັດຢ່າງໃດດີ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທັງຫລາຍ ພວກທ່ານບໍ່ຕ້ອງອາບັຕິ ເພາະເຂົາຮຽກດ້ວຍຄວາມເຫລື້ອມໃສ" (ເຣື່ອງທີ ໔໘)

## ເຣື້ອງພຍາກອນມັຄຜົລ ໖ ເຣື່ອງ

ສມັຍນັ້ນ ພິກສຸຮູບນຶ່ງກ່າວອວດອຸຕຕຣິມນຸສສທັມແກ່ພິກສຸອີກຮູບນຶ່ງ ແມ່ນພິກສຸຮູບນັ້ນກໍກ່າວອວດວ່າ "ຜູ້ຂ້າກໍລະອາສວະໄດ້" ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່

ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໔໙)

ສມັຍນັ້ນ ພິກສຸຮູບນຶ່ງກ່າວອວດອຸຕຕຣິມນຸສສທັມແກ່ພິກສຸອີກຮູບນຶ່ງ ແມ່ນພິກສຸຮູບນັ້ນກໍກ່າວອວດວ່າ "ທັມເຫລົ່ານີ້ແມ່ນມແຕ່ຜູ້ຂ້າກໍມີ" ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໕໐)

ສມັຍນັ້ນ ພິກສຸຮູບນຶ່ງກ່າວອວດອຸຕຕຣິມນຸສສທັມແກ່ພິກສຸອີກຮູບນຶ່ງ ແມ່ນພິກສຸຮູບນັ້ນກໍກ່າວອວດວ່າ "ຜູ້ຂ້າກໍປາກົດໃນທັມເຫລົ່ານັ້ນ" ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື່ອງທີ ໕໑)

## ເຣື້ອງຢູ່ຄອງເຮືອນ ໑ ເຣື່ອງ

ສມັຍນັ້ນ ພວກຍາຕບອກພິກສຸຮູບນຶ່ງວ່າ "ນິມົນຕ໌ທ່ານມາຢູ່ຄອງເຮືອນເຖີດ ຂນ້ອຍ" ພິກສຸຮູບນັ້ນຕອບວ່າ "ທ່ານທັງຫລາຍ ຄົນຢ່າງອາຕມາບໍ່ຄວຣຈະຢູ່ຄອງເຮືອນ" ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ" "ຂ້າພຣະພຸທທເຈົ້າບໍ່ມີຄວາມປະສົງຄ໌ຈະກ່າວອວດ ພຣະພຸທທເຈົ້າຂ້າ" "ພິກສຸ ທ່ານບໍ່ມີຄວາມປະສົງຄ໌ຈະກ່າວອວດ ບໍ່ຕ້ອງອາບັຕິ" (ເຣື່ອງທີ ໕໔)

## ເຣື້ອງຫ້າມກາມ ໑ ເຣື້ອງ

[໒໔໗] ສມັຍນັ້ນ ພວກຍາຕບອກພິກສຸຮູບນຶ່ງວ່າ "ນິມົນຕ໌ທ່ານມາບໍຣິໂພຄກາມເຖີດ" ພິກສຸນັ້ນຕອບວ່າ "ທ່ານທັງຫລາຍ ເຮົາປຕິເສທກາມທັງຫລາຍແລ້ວ" ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກ ຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ "ຂ້າພຣະພຸທທເຈົ້າບໍ່ມີຄວາມປະສົງຄ໌ຈະກ່າວອວດ ພຣະພຸທທເຈົ້າຂ້າ" "ພິກສຸ ທ່ານບໍ່ມີຄວາມປະສົງຄ໌ຈະກ່າວອວດ ບໍ່ຕ້ອງອາບັຕິ" (ເຣື່ອງທີ ໕໕)

## ເຣື້ອງຄວາມຍິນດີ ໑ ເຣື່ອງ

ສມັຍນັ້ນ ພວກຍາຕຖາມພິກສຸຮູບນຶ່ງວ່າ "ທ່ານຍັງຍິນດີຢູ່ຫລື" ພິກສຸນັ້ນຕອບວ່າ "ອາຕມາຍັງຍິນດີຢູ່ດ້ວຍຄວາມຍິນດີເປັນຢ່າງຍິ່ງ"໑ ທ່ານເກີດຄວາມກັງວົລໃຈວ່າສະເພາະພຣະສາວົກຂອງພຣະຜູ້ມີພຣະພາຄເທົ່ານັ້ນທີ່ຄວຣກ່າວຢ່າງນັ້ນ ແຕ່ເຮົາບໍ່ໄດ້ເປັນພຣະສາວົກຂອງພຣະຜູ້ມີພຣະພາຄ ເຮົາຕ້ອງອາບັຕິປາຣາຊິກຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຄິດຢ່າງໃດ "ຂ້າພຣະພຸທທເຈົ້າບໍ່ມີຄວາມປະສົງຄ໌ຈະກ່າວອວດ ພຣະພຸທທເຈົ້າຂ້າ" "ພິກສຸ ທ່ານບໍ່ມີຄວາມປະສົງຄ໌ຈະກ່າວອວດ ບໍ່ຕ້ອງອາບັຕິ" (ເຣື້ອງທີ ໖໔)

## ເຣື້ອງຫລີກໄປ ໑ ເຣື້ອງ

ສມັຍນັ້ນ ພິກສຸຈຳນວນຫລາຍຈຳພັນສາໃນອາວາສແຫ່ງນຶ່ງ ຕັ້ງກຕິກາກັນວ່າ "ຂໍໃຫ້ພວກເຮົາຮູ້ກັນ ພິກສຸຮູບໃດຫລີກໄປຈາກອາວາສນີ້ກ່ອນ ພິກສຸຮູບນັ້ນເປັນພຣະອຣຫັນຕ໌" ພິກສຸຮູບນຶ່ງຫລີກຈາກອາວາສນັ້ນໄປກ່ອນດ້ວຍຕ້ອງການໃຫ້ຜູ້ອື່ນຮູ້ວ່າຕົນເປັນພຣະອຣຫັນຕ໌ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິປາຣາຊິກ ຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິປາຣາຊິກ" (ເຣື້ອງທີ ໖໕)

## ເຣື້ອງອັຕຖິກສັງຂລິກເຜດ ໑ ເຣື້ອງ
## (ເຜດມີແຕ່ຮ່າງກະດູກ)

[໔໔໗] ສມັຍນັ້ນ ພຣະຜູ້ມີພຣະພາຄປະທັບ ນະ ພຣະເວຣຸວັນ ສຖານທີ່ໃຫ້ເຫຍື່ອກະແຕ ເຂຕກຸງຣາຊຄືຫ໌ ຄັ້ງນັ້ນ ທ່ານພຣະລັກຂນະກັບທ່ານພຣະມຫາໂມຄຄັລລານະພັກຢູ່ທີ່ພູເຂົາຄິຊຢກູຕ ຄັນເວລາເຊົ້າ ພຣະມຫາໂມຄຄັລລານະຄອງອັນຕຣວາສກ ຖືບາຕຣແລະຈີວອນເຂົ້າໄປຫາພຣະລັກຂນະຈົນເຖິງທີ່ຢູ່ ເຊີນຊວນວ່າ "ທ່ານລັກຂນະມາເຖີດ ພວກເຮົາຈະໄປບິນທບາຕໃນກຸງຣາຊຄືຫ໌ດ້ວຍກັນ" ພຣະລັກຂນະຮັບຄຳແລ້ວ ຂນະທີ່ພຣະມຫາໂມຄຄັລລານະກຳລັງລົງຈາກພູເຂົາຄິຊຢກູຕເຖິງສຖານທີ່ແຫ່ງນຶ່ງໄດ້ສະແດງອາການແຍ້ມ ພຣະລັກຂນະຖາມວ່າ "ທ່ານໂມຄຄັລລານະ ແມ່ນຫຍັງເປັນເຫຕຸເປັນປັຈຈັຍໃຫ້ທ່ານສະແດງອາການແຍ້ມ"

ພຣະມຫາໂມຄຄັລລານະຕອບວ່າ "ທ່ານລັກຂນະ ຍັງບໍ່ເຖິງເວລາຕອບບັນຫານີ້ ເມື່ອເຂົ້າເຝົ້າພຣະຜູ້ມີພຣະພາຄ ຄ່ອຍຖາມບັນຫານີ້ເຖີດ" ຄັນທ່ານທັງ ໒ ທຽວບິນທບາຕໃນກຸງຣາຊຄືຫ໌ ກັບຈາກບິນທບາຕຫລັງຈາກສັນອາຫາຣ ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຖວາຍບັງຄົມແລ້ວນັ່ງລົງ ນະ ທີ່ສົມຄວຣ ຄັນແລ້ວພຣະລັກຂນະໄດ້ກ່າວຂຶ້ນວ່າ "ທ່ານມຫາໂມຄຄັລລານະ ເມື່ອ

ທ່ານລົງຈາກພູເຂົາຄິຊຸປກູຕ ໃນກຸງຣາຊຄຶຫ໌ນີ້ ເຖິງສຖານທີ່ແຫ່ງນຶ່ງໄດ້ສະແດງອາການແຍ້ມ ແມ່ນຫຍັງເປັນເຫຕຸເປັນປັຈຈັຍໃຫ້ທ່ານສະແດງອາການແຍ້ມ”

ພຣະມຫາໂມຄຄັລລານະຕອບວ່າ “ທ່ານ ເມື່ອຜູ້ຂ້າລົງຈາກພູເຂົາຄິຊຸປກູຕໄດ້ເຫັນອັຕຖິສັງຂລິກ ເຜດ ລອຍຂຶ້ນສູ່ກາງອາກາສ ຝູງແຮ້ງ ນົກກາ ນົກແຫລວພາກັນບິນແຊ່ອຢູ່ຂວັກໄຂວ່ ຈິກທຶ້ງຍື້ ແຍ່ງຊີ້ນທີ່ຕິດຢູ່ຕາມຣະຫວ່າງກະດູກຂ້າງແກວ່ງໄປມາຈົນມັນຮ້ອງຄອນຄາງ ຂະນ້ອຍມີຄວາມຮູ້ສຶກ ວ່າ ໜ້າອັສຈັນແທ້ບໍ່ເຄີຍປາກົດ ທີ່ມີສັຕວ໌ເຊັ່ນນີ້ ມີຍັກສ໌ເຊັ່ນນີ້ ມີເຜດເຊັ່ນນີ້ ມີການໄດ້ອັຕພາພ ເຊັ່ນນີ້ຢູ່” ພິກສຸທັງຫລາຍພາກັນຕຳໜິ ປະນາມ ໂພນທະນາວ່າ “ພຣະມຫາໂມຄຄັລລານະ ກ່າ ວອວດອຸຕຕຣິມນຸສສທັມ”

ລຳດັບນັ້ນ ພຣະຜູ້ມີພຣະພາຄຕຣັສຮຽກພິກສຸທັງຫລາຍມາຮັບສັ່ງວ່າ “ພິກສຸທັງຫລາຍ ສາວົກທັງ ຫລາຍທີ່ມີຈັກສຸຢານກໍຍັງມີຢູ່ ເພາະສາວົກທີ່ຮູ້ທີ່ເຫັນນີ້ເປັນພຍານໄດ້ ເມື່ອກ່ອນເຮົາກໍເຫັນອັຕຖິ ສັງຂລິກເຜດນັ້ນແຕ່ບໍ່ພຍາກອນ ເພາະການພຍາກອນນັ້ນຈະບໍ່ເປັນປໂຍດເກື້ອກູລ ຊ້ຳຈະເປັນທຸກຂ໌ ຍາວນານ ແກ່ຜູ້ທີ່ບໍ່ເຊື່ອເຮົາ ພິກສຸທັງຫລາຍ ເຜດນັ້ນເຄີຍເປັນຄົນຂ້າໂຄໃນກຸງຣາຊຄຶຫ໌ ເພາະຜົລກັມນັ້ນ ຈຶ່ງຕົກນຣົກໝົກໄໝ້ຢູ່ຫລາຍຮ້ອຍປີ ຫລາຍພັນປີ ຫລາຍແສນປີແລ້ວໄດ້ມີ ອັຕພາພເຊັ່ນນີ້ ເພາະເສສກັມທີ່ຍັງເຫລືອ ໂມຄຄັລລານະກ່າວ ຈິງ ຈຶ່ງບໍ່ຕ້ອງອາບັຕິ” (ເຣື່ອງທີ ໑໖)

## ເຣື່ອງມັງສເປສີເຜດ ໑ ເຣື່ອງ
## (ເຜດມີແຕ່ຮ່າງຊີ້ນເນື້ອ)

[໔໔໗] ສມັຍນັ້ນ ພຣະຜູ້ມີພຣະພາຄປະທັບ ນະ ພຣະເວຣຸວັນ ສຖານທີ່ໃຫ້ເຫຍື່ອກະແຕ ເຂຕກຸງ ຣາຊຄຶຫ໌ ຄັ້ງນັ້ນ ທ່ານພຣະລັກຂນະກັບພຣະມຫາໂມຄຄັລລານະພັກຢູ່ທີ່ເຂົາຄິຊຸປກູຕ ຄັນເວລາເຊົ້າ ພຣະມຫາໂມຄຄັລລານະຄອງອັນຕຣວາສກຖືບາຕຣແລະຈີວອນເຂົ້າໄປຫາພຣະລັກຂນະຈົນເຖິງທີ່ຢູ່ ເຊີນຊວນວ່າ “ທ່ານລັກຂນະ ມາເຖີດ ພວກເຮົາຈະໄປບິນທບາຕໃນກຸງຣາຊຄຶຫ໌ດ້ວຍກັນ” ພຣະ ລັກຂນະຮັບຄຳແລ້ວ ຂນະທີ່ພຣະມຫາໂມຄຄັລລານະກຳລັງລົງຈາກພູເຂົາຄິຊຸປກູຕ ເຖິງສຖານທີ່ ແຫ່ງນຶ່ງໄດ້ສະແດງອາການແຍ້ມ ພຣະລັກຂນະຖາມວ່າ “ທ່ານໂມຄຄັລລານະ ແມ່ນຫຍັງເປັນເຫຕຸ ເປັນປັຈຈັຍໃຫ້ທ່ານສະແດງອາການແຍ້ມ” ພຣະມຫາໂມຄຄັລລານະຕອບວ່າ “ທ່ານລັກຂນະ ຍັງບໍ່ ເຖິງເວລາຕອບບັນຫານີ້ ເມື່ອເຂົ້າເຝົ້າພຣະຜູ້ມີພຣະພາຄຄ່ອຍຖາມບັນຫານີ້ເຖີດ”

ຄັນທ່ານທັງ ໒ ທ່ຽວບິນທບາຕໃນກຸງຣາຊຄຶຫ໌ ກັບຈາກບິນທບາຕ ຫລັງຈາກສັນອາຫານ ເຂົ້າໄປ

ເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຖວາຍບັງຄົມແລ້ວນັ່ງລົງ ນະ ທີ່ສົມຄວຣ ຄັນແລ້ວພຣະລັກຂນະໄດ້ກ່າວຂຶ້ນວ່າ "ທ່ານມຫາໂມຄຄັລລານະ ເມື່ອທ່ານລົງຈາກພູເຂົາຄິຊຢກູຕ ໃນກຸງຣາຊຄຶຫ໌ນີ້ ເຖິງສຖານທີ່ແຫ່ງນຶ່ງໄດ້ສະແດງອາການແຍ້ມ ແມ່ນຫຍັງເປັນເຫຕຸເປັນປັຈຈັຍໃຫ້ທ່ານສະແດງອາການແຍ້ມ" ພຣະມຫາໂມຄຄັລລານະຕອບວ່າ "ທ່ານ ເມື່ອຜູ້ຂ້າລົງຈາກພູເຂົາຄິຊຢກູຕ ໄດ້ເຫັນມັງສເປສິເຜດ ລອຍຂຶ້ນສູ່ກາງອາກາສ ຝູງແຮ້ງ ນົກກາ ແຫລວພາກັນບິນແຊ່ວຢູ່ຂວັກໄຂວ່ຈິກທຶ້ງຍື້ແຍ່ງເຜດນັ້ນແກວ່ງໄປມາຈົນມັນຮ້ອງຄວນຄາງ ຜູ້ຂ້າມີຄວາມຮູ້ສຶກວ່າ ຫນ້າອັສຈັນແມ່ນແທ້ບໍ່ເຄີຍປາກົດ ທີ່ມີສັຕວ໌ເຊັ່ນນີ້ ມີຍັກສ໌ເຊັ່ນນີ້ ມີເຜດເຊັ່ນນີ້ ມີກາຣໄດ້
ອັຕພາພເຊັ່ນນີ້ຢູ່ ພິກສຸທັງຫລາຍພາກັນຕຳຫນິ ປະນາມ ໂພນທະນາວ່າ "ພຣະມຫາໂມຄຄັລລານະກ່າວອວດອຸຕຕຣິມນຸສສທັມ"
ລຳດັບນັ້ນ ພຣະຜູ້ມີພຣະພາຄຕຣັສຮຽກພິກສຸທັງຫລາຍມາຮັບສັ່ງວ່າ "ພິກສຸທັງຫລາຍ ສາວົກທັງຫລາຍທີ່ມີຈັກສຸຢານ(ຕາທິບ)ກໍຍັງມີຢູ່ ເພາະສາວົກທີ່ຮູ້ທີ່ເຫັນນີ້ເປັນພຍານໄດ້ ເມື່ອກ່ອນເຮົາກໍເຫັນມັງສເປສິເຜດນັ້ນແຕ່ບໍ່ພຍາກອນ ເພາະກາຣພຍາກອນນັ້ນຈະບໍ່ເປັນປໂຍດເກື້ອກູລຊ້ຳຈະເປັນທຸກຂ໌ຍາວນານ ແກ່ຜູ້ທີ່ບໍ່ເຊື່ອເຮົາ ພິກສຸທັງຫລາຍ ເຜດນັ້ນເຄີຍເປັນຄົນຂ້າໂຄຢູ່ໃນກຸງຣາຊຄຶຫ໌ເພາະຜົລກັມນັ້ນ ຈຶ່ງຕົກນຣົກຫມົກໄຫມ້ຢູ່
ຫລາຍຮ້ອຍປີ ຫລາຍພັນປີ ຫລາຍແສນປີແລ້ວໄດ້ມີອັຕພາພເຊັ່ນນີ້ ເພາະເສສກັມທີ່ຍັງເຫລືອໂມຄຄັລລານະກ່າວຈິງຈຶ່ງບໍ່ຕ້ອງອາບັຕິ" (ເຣື່ອງທີ ໖໗)

## ເຣື່ອງມັງສປິນຫເຜດ ໑ ເຣື່ອງ
## (ເຜດຮ່າງກ້ອນຊີ້ນ)

ສມັຍນັ້ນ ພຣະຜູ້ມີພຣະພາຄປະທັບ ນະ ພຣະເວຣຸວັນ ສຖານທີ່ໃຫ້ເຫຍື່ອກະແຕເຂຕກຸງຣາຊຄຶຫ໌ຄັ້ງນັ້ນ ທ່ານພຣະລັກຂນະກັບພຣະມຫາໂມຄຄັລລານະພັກຢູ່ທີ່ເຂົາຄິຊຢກູຕ ຄັນເວລາເຊົ້າ ພຣະມຫາໂມຄຄັລລານະຄອງອັນຕຣວາສກຖືບາຕຣແລະຈີວອນເຂົ້າໄປຫາພຣະລັກຂນະຈົນເຖິງທີ່ຢູ່ ເຊີນຊວນວ່າ "ທ່ານລັກຂນະ ມາເຖີດ ພວກເຮົາຈະໄປບິນຫບາຕໃນກຸງຣາຊຄຶຫ໌ດ້ວຍກັນ" ພຣະລັກຂນະຮັບຄຳແລ້ວ ຂນະທີ່ພຣະມຫາໂມຄຄັລລານະກຳລັງລົງຈາກພູເຂົາຄິຊຢກູຕ ເຖິງສຖານທີ່ແຫ່ງນຶ່ງໄດ້ສະແດງອາການແຍ້ມ ພຣະລັກຂນະຖາມວ່າ "ທ່ານໂມຄຄັລລານະ ແມ່ນຫຍັງເປັນເຫຕຸເປັນປັຈຈັຍໃຫ້ທ່ານສະແດງອາການແຍ້ມ" ພຣະມຫາໂມຄຄັລລານະຕອບວ່າ "ທ່ານລັກຂນະ ຍັງບໍ່ເຖິງເວລາຕອບບັນຫານີ້ ເມື່ອເຂົ້າເຝົ້າພຣະຜູ້ມີພຣະພາຄຄ່ອຍຖາມບັນຫານີ້ເຖີດ" ຄັນທ່ານທັງ ໔ ຫງວ

ບິນທະບາຕໃນກຸງຣາຊຄຶຫ໌ ກັບຈາກບິນທະບາຕ ຫລັງຈາກສັນອາຫານ ເຂົ້າໄປເຝົ້າພຣະຜູ້ມີພຣະພາຄ ເຖິງທີ່ປະທັບ ຖວາຍບັງຄົມແລ້ວນັ່ງລົງ ນະ ທີ່ສົມຄວນ ຄັນແລ້ວພຣະລັກຂນະໄດ້ກ່າວຂຶ້ນວ່າ "ທ່ານມຫາໂມຄຄັລລານະ ເມື່ອທ່ານລົງຈາກພູເຂົາຄິຊຍກູຕ ໃນກຸງຣາຊຄຶຫ໌ນີ້ ເຖິງສຖານທີ່ແຫ່ງນຶ່ງໄດ້ສະແດງອາການແຍ້ມ ແມ່ນຫຍັງເປັນເຫຕຸ ເປັນປັຈຈັຍໃຫ້ທ່ານສະແດງອາການແຍ້ມ" ພຣະມຫາໂມຄຄັລລານະຕອບວ່າ "ທ່ານ ເມື່ອຜູ້ຂ້າລົງຈາກພູເຂົາຄິຊຍກູຕໄດ້ເຫັນມັງສປິນທະເຜດ ລອຍໃນອາກາສ ຝູງແຮ້ງ ນົກກາ ແຫລວພາກັນບິນແຊ່ວຍູ່ຂວັກໄຂວ່ຈິກທຶ້ງຍື້ແຍ່ງເຜດນັ້ນແກວ່ງໄປມາຈິນມັນຮ້ອງຄວນຄາງ ຜູ້ຂ້າມີຄວາມຮູ້ສຶກວ່າ ຫນ້າອັສຈັນແທ້ບໍ່ເຄີຍປາກົດ ທີ່ມີສັຕວ໌ເຊັ່ນນີ້ ມີຍັກສ໌ເຊັ່ນນີ້ ມີເຜດເຊັ່ນນີ້ ມີການໄດ້ອັຕພາພເຊັ່ນນີ້ຢູ່"

ພິກສຸທັງຫລາຍພາກັນຕຳຫນິ ປະນາມ ໂພນທນາວ່າ "ພຣະມຫາໂມຄຄັລລານະກ່າວອວດອຸຕຕຣິມນຸສສທັມ"

ລຳດັບນັ້ນ ພຣະຜູ້ມີພຣະພາຄຕຣັສຮຽກພິກສຸທັງຫລາຍມາຮັບສັ່ງວ່າ "ພິກສຸທັງຫລາຍ ສາວົກທັງຫລາຍທີ່ມີຈັກສຸຢານກໍຍັງມີຢູ່ ເພາະສາວົກທີ່ຮູ້ທີ່ເຫັນນີ້ເປັນພຍານໄດ້ ເມື່ອກ່ອນເຮົາກໍເຫັນມັງສປິນທະເຜດນັ້ນ ແຕ່ບໍ່ ພຍາກອນ ເພາະການພຍາກອນນັ້ນຈະບໍ່ເປັນປໂຍດເກື້ອກູລຊ້ຳຈະເປັນທຸກຂ໌ຍາວນານ ແກ່ຜູ້ທີ່ບໍ່ເຊື່ອເຮົາ ພິກສຸທັງຫລາຍ ເຜດນັ້ນເຄີຍເປັນຄົນຂ້ານົກໃນກຸງຣາຊຄຶຫ໌ ເພາະຜົລກັມນັ້ນ ຈຶ່ງຕົກນຣົກຫມົກໄຫມ້ຢູ່ຫລາຍ

ຮ້ອຍປີ ຫລາຍພັນປີ ຫລາຍແສນປີແລ້ວໄດ້ມີອັຕພາພເຊັ່ນນີ້ ເພາະເສສກັມທີ່ຍັງເຫລືອ ໂມຄຄັລລານະກ່າວ ຈິງ ຈຶ່ງບໍ່ຕ້ອງອາບັຕິ" (ເຣື່ອງທີ ໒໗)

## ເຣື່ອງນິຈສວິເຜດເພສຊາຍ ໑ ເຣື່ອງ
## (ເຜດຮ່າງບໍ່ມີຜິວຫນັງເພສຊາຍ)

ສມັຍນັ້ນ ພຣະຜູ້ມີພຣະພາຄປະທັບ ນະ ພຣະເວຣຸວັນ ສຖານທີ່ໃຫ້ເຫຍື່ອກະແຕ ເຂຕກຸງຣາຊຄຶຫ໌ ຄັ້ງນັ້ນ ທ່ານພຣະລັກຂນະກັບພຣະມຫາໂມຄຄັລລານະພັກຢູ່ທີ່ເຂົາຄິຊຍກູຕ ຄັນເວລາເຊົ້າ ພຣະມຫາໂມຄຄັລລານະຄອງອັນຕຣວາສກຖືບາຕຣແລະຈີວອນເຂົ້າໄປຫາພຣະລັກຂນະຈົນເຖິງທີ່ຢູ່ ເຊີນຊວນວ່າ "ທ່ານລັກຂນະ ມາເຖີດ ພວກເຮົາຈະໄປບິນທະບາຕໃນກຸງຣາຊຄຶຫ໌ດ້ວຍກັນ" ພຣະລັກຂນະຮັບຄຳແລ້ວ ຂນະທີ່ພຣະມຫາໂມຄຄັລລານະກຳລັງລົງຈາກພູເຂົາຄິຊຍກູຕ ເຖິງສຖານທີ່ແຫ່ງນຶ່ງໄດ້ສະແດງອາການແຍ້ມ ພຣະລັກຂນະຖາມວ່າ "ທ່ານໂມຄຄັລລານະ ແມ່ນຫຍັງເປັນເຫຕຸເປັນປັຈຈັຍໃຫ້ທ່ານສະແດງອາການແຍ້ມ" ພຣະມຫາໂມຄຄັລລານະຕອບວ່າ "ທ່ານລັກຂນະ ຍັງບໍ່ເຖິງເວລາ

ຕອບບັນຫານີ້ ເມື່ອເຂົ້າເຝົ້າພຣະຜູ້ມີພຣະພາຄຄ່ອຍຖາມບັນຫານີ້ເຖີດ" ຄັນທ່ານທັງ ໔ ທຽວບິນທຸບາຕໃນກຸງຣາຊຄຶຫ໌ ກັບຈາກບິນທຸບາຕ ຫລັງຈາກສັນອາຫາຣ ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຖວາຍບັງຄົມແລ້ວນັ່ງລົງ ນະ ທີ່ສົມຄວຣ ຄັນແລ້ວພຣະລັກຂນະໄດ້ກ່າວຂຶ້ນວ່າ "ທ່ານມຫາໂມຄຄັລລານະ ເມື່ອທ່ານລົງຈາກພູເຂົາຄິຊຸຢກູຕ ໃນກຸງຣາຊຄຶຫ໌ນີ້ ເຖິງສຖານທີ່ແຫ່ງນຶ່ງໄດ້ສະແດງອາການແຍ້ມ ແມ່ນຫຍັງເປັນເຫຕຸເປັນປັຈຈັຍໃຫ້ທ່ານສະແດງອາການແຍ້ມ" ພຣະມຫາໂມຄຄັລລານະຕອບວ່າ "ທ່ານເມື່ອຜູ້ຂ້າລົງຈາກພູເຂົາຄິຊຸຢກູຕໄດ້ເຫັນນິຈສວິເຜດເພສຊາຍລອຍໃນອາກາສ ຝູງແຮ້ງ ນົກກາ ແຫລວພາກັນບິນແຊ່ອຢູ່ຂວັກໄຂວ່ຈິກທຶ້ງຍື້ແຍ່ງເຜດນັ້ນແກວ່ງໄປມາຈິນມັນຮ້ອງຄວນຄາງ ຜູ້ຂ້າມີຄວາມຮູ້ສຶກວ່າ ຫນ້າອັສຈັນແທ້ບໍ່ເຄີຍປາກົດ ທີ່ມີສັຕວ໌ເຊັ່ນນີ້ມີຍັກສ໌ເຊັ່ນນີ້ ມີເຜດເຊັ່ນນີ້ ມີກາຣໄດ້ອັຕພາພເຊັ່ນນີ້ຢູ່" ພິກສຸທັງຫລາຍພາກັນຕໍາຫນິ ປະນາມໂພນທນາວ່າ "ພຣະມຫາໂມຄຄັລລານະກ່າວອວດອຸຕຕຣິມນຸສສທັມ" ລໍາດັບນັ້ນ ພຣະຜູ້ມີພຣະພາຄຕຣັສຮຽກພິກສຸທັງຫລາຍມາຮັບສັ່ງວ່າ "ພິກສຸທັງຫລາຍ ສາວົກທັງຫລາຍທີ່ມີຈັກສຸຢານກໍຍັງມີຢູ່ເພາະສາວົກທີ່ຮູ້ທີ່ເຫັນນີ້ເປັນພຍານໄດ້ ເມື່ອກ່ອນເຮົາກໍເຫັນນິຈສວິເຜດເພສຊາຍນັ້ນແຕ່ບໍ່ພຍາກອນ ເພາະກາຣພຍາກອນນັ້ນຈະບໍ່ເປັນປໂຍດເກື້ອກູລຊ້ໍາຈະເປັນທຸກຂ໌ຍາວດົນແກ່ຜູ້ທີ່ບໍ່ເຊື່ອເຮົາ ພິກສຸທັງຫລາຍ ເຜດນັ້ນເຄີຍເປັນຄົນຂ້າແກະໃນກຸງຣາຊຄຶຫ໌ ເພາະຜົລກັມນັ້ນ ຈຶ່ງຕົກນຣົກຫມົກໄຫມ້ຢູ່ຫລາຍຮ້ອຍປີ ຫລາຍພັນປີ ຫລາຍແສນປີແລ້ວໄດ້ມີອັຕພາພເຊັ່ນນີ້ ເພາະເສສກັມທີ່ຍັງເຫລືອ ໂມຄຄັລລານະກ່າວຈິງ ຈຶ່ງບໍ່ຕ້ອງອາບັຕິ" (ເຣື້ອງທີ ໖໙)

## ເຣື້ອງວສີໂລມເຜດເພສຊາຍ ໑ ເຣື້ອງ
## (ເຜດຮ່າງມີຂົນເປັນດາບເພສຊາຍ)

ສມັຍນັ້ນ ພຣະຜູ້ມີພຣະພາຄປະທັບ ນະ ພຣະເວຣຸວັນ ສຖານທີ່ໃຫ້ເຫຍື່ອກະແຕ ເຂຕກຸງຣາຊຄຶຫ໌ຄັ້ງນັ້ນ ທ່ານພຣະລັກຂນະກັບພຣະມຫາໂມຄຄັລລານະພັກຢູ່ທີ່ເຂົາຄິຊຸຢກູຕ ຄັນເວລາເຊົ້າ ພຣະມຫາໂມຄຄັລລານະຄອງອັນຕຣວາສກຖືບາຕຣແລະຈີວອນເຂົ້າໄປຫາພຣະລັກຂນະຈົນເຖິງທີ່ຢູ່ ເຊີນຊວນວ່າ "ທ່ານລັກຂນະ ມາເຖີດ ພວກເຮົາຈະໄປບິນທຸບາຕໃນກຸງຣາຊຄຶຫ໌ດ້ວຍກັນ" ພຣະລັກຂນະຮັບຄໍາແລ້ວ ຂນະທີ່ພຣະມຫາໂມຄຄັລລານະກໍາລັງລົງຈາກພູເຂົາຄິຊຸຢກູຕ ເຖິງສຖານທີ່ແຫ່ງນຶ່ງໄດ້ສະແດງອາການແຍ້ມ ພຣະລັກຂນະຖາມວ່າ "ທ່ານໂມຄຄັລລານະ ແມ່ນຫຍັງເປັນເຫຕຸເປັນປັຈຈັຍໃຫ້ທ່ານສະແດງອາການແຍ້ມ" ພຣະມຫາໂມຄຄັລລານະຕອບວ່າ "ທ່ານລັກຂນະ ຍັງບໍ່ເຖິງເວລາຕອບບັນຫານີ້ ເມື່ອເຂົ້າເຝົ້າພຣະຜູ້ມີພຣະພາຄຄ່ອຍຖາມບັນຫານີ້ເຖີດ"

ຄັນທ່ານທັງ ໔ ທ່ຽວບິນທະບາຕໃນກຸງຣາຊຄຶຫ໌ ກັບຈາກບິນທະບາຕ ຫລັງຈາກສັນອາຫານ ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຖວາຍບັງຄົມແລ້ວນັ່ງລົງ ນະ ທີ່ສົມຄວນ ຄັນແລ້ວພຣະລັກຂນະໄດ້ກ່າວຂຶ້ນວ່າ “ທ່ານມຫາໂມຄຄັລລານະ ເມື່ອທ່ານລົງຈາກພູເຂົາຄິຊຍກູຕ ໃນກຸງຣາຊຄຶຫ໌ນີ້ ເຖິງສຖານທີ່ແຫ່ງນຶ່ງໄດ້ສະແດງອາການແຍ້ມ ແມ່ນຫຍັງເປັນເຫຕຸເປັນປັຈຈັຍໃຫ້ທ່ານສະແດງອາການແຍ້ມ” ພຣະມຫາໂມຄຄັລລານະຕອບວ່າ “ທ່ານເມື່ອຜູ້ຂ້າລົງຈາກພູເຂົາຄິຊຍກູຕໄດ້ເຫັນອສີໂລມເຜດເພສູຊາຍ ລອຍໃນອາກາສູ (ຂົນ) ດາບເຫລົ່ານັ້ນຂອງມັນຫລຸດລອຍຂຶ້ນໄປແລ້ວກັບຕົກລົງທີ່ຮ່າງຂອງມັນເອງຈົນມັນຮ້ອງຄວນຄາງ ຜູ້ຂ້າມີຄວາມຮູ້ສຶກວ່າ ຫນ້າອັສຈັນແທ້ບໍ່ເຄີຍປາກົດທີ່ມີສັຕວ໌ເຊັ່ນນີ້ ມີຍັກສູ໌ເຊັ່ນນີ້ ມີເຜດເຊັ່ນນີ້ ມີກາຣໄດ້ອັຕພາພເຊັ່ນນີ້ຢູ່” ພິກສຸທັງຫລາຍພາກັນຕຳຫນິ ປະນາມ ໂພນທນາວ່າ “ພຣະມຫາໂມຄຄັລລານະກ່າວອວດອຸຕຕຣິມນຸສ ສທັມ” ລຳດັບນັ້ນພຣະຜູ້ມີພຣະພາຄຕຣັສຮຽກພິກສູທັງຫລາຍມາຮັບສັ່ງວ່າ “ພິກສຸທັງຫລາຍ ສາວົກທັງຫລາຍທີ່ມີຈັກສຸຢານກໍຍັງມີຢູ່ ເພາະສາວົກທີ່ຮູ້ທີ່ເຫັນນີ້ເປັນພຍານໄດ້ ເມື່ອກ່ອນເຮົາກໍເຫັນອສີໂລມເຜດເພສູຊາຍນັ້ນແຕ່ບໍ່ພຍາກອນ ເພາະກາຣພຍາກອນນັ້ນຈະບໍ່ເປັນປໂຍດເກື້ອກູລຊ້ຳຈະເປັນທຸກຂ໌ຍາວດົນແກ່ຜູ້ທີ່ບໍ່ເຊື່ອເຮົາ ພິກສູທັງຫລາຍ ເຜດນັ້ນເຄີຍເປັນຄົນຂ້າຫມູໃນກຸງຣາຊຄຶຫ໌ ເພາະຜົລກັມນັ້ນຈຶ່ງຕົກນຣົກຫມົກໄຫມ້ຢູ່ຫລາຍຮ້ອຍປີ ຫລາຍພັນປີ ຫລາຍແສນປີແລ້ວໄດ້ມີອັຕພາພເຊັ່ນນີ້ເພາະເສສູກັມທີ່ຍັງເຫລືອ ໂມຄຄັລລານະກ່າວຈິງຈຶ່ງບໍ່ຕ້ອງອາບັຕິ” (ເຣື່ອງທີ ໔໐)

## ເຣື່ອງສັຕຕິໂລມເຜດເພສູຊາຍ ໑ ເຣື່ອງ
## (ເຜດຮ່າງມີຂົນເປັນຫອກເພສູຊາຍ)

ສມັຍນັ້ນ ພຣະຜູ້ມີພຣະພາຄປະທັບ ນະ ພຣະເວຣຸວັນ ສຖານທີ່ໃຫ້ເຫຍື່ອກະແຕ ເຂຕກຸງຣາຊຄຶຫ໌ຄັ້ງນັ້ນ ທ່ານພຣະລັກຂນະກັບພຣະມຫາໂມຄຄັລລານະພັກຢູ່ທີ່ເຂົາຄິຊຍກູຕ ຄັນເວລາເຊົ້າ ພຣະມຫາໂມຄຄັລລານະຄອງອັນຕຣວາສກຖືບາຕຣແລະຈີວອນເຂົ້າໄປຫາພຣະລັກຂນະຈົນເຖິງທີ່ຢູ່ ເຊີນຊວນວ່າ “ທ່ານລັກຂນະ ມາເຖີດ ພວກເຮົາຈະໄປບິນທະບາຕໃນກຸງຣາຊຄຶຫ໌ດ້ວຍກັນ” ພຣະລັກຂນະຮັບຄຳແລ້ວ ຂນະທີ່ພຣະມຫາໂມຄຄັລລານະກຳລັງລົງຈາກພູເຂົາຄິຊຍກູຕ ເຖິງສຖານທີ່ແຫ່ງນຶ່ງໄດ້ສະແດງອາການແຍ້ມ ພຣະລັກຂນະຖາມວ່າ “ທ່ານໂມຄຄັລລານະ ແມ່ນຫຍັງເປັນເຫຕຸເປັນປັຈຈັຍໃຫ້ທ່ານສະແດງອາການແຍ້ມ” ພຣະມຫາໂມຄຄັລລານະຕອບວ່າ “ທ່ານລັກຂນະ ຍັງບໍ່ເຖິງເວລາຕອບບັນຫານີ້ ເມື່ອເຂົ້າເຝົ້າພຣະຜູ້ມີພຣະພາຄຄ່ອຍຖາມບັນຫານີ້ເຖີດ”

ຄັນທ່ານທັງ ໔ ທ່ຽວບິນທະບາຕໃນກຸງຣາຊຄຶຫ໌ ກັບຈາກບິນທະບາຕ ຫລັງຈາກສັນອາຫານ ເຂົ້າໄປ

ເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຖວາຍບັງຄົມແລ້ວນັ່ງລົງ ນະ ທີ່ສົມຄວຣ ຄັນແລ້ວພຣະລັກຂນະໄດ້ກ່າວຂຶ້ນວ່າ "ທ່ານມຫາໂມຄຄັລລານະ ເມື່ອທ່ານລົງຈາກພູເຂົາຄິຊຢກູຕ ໃນກຸງຣາຊຄຶຫ໌ນີ້ ເຖິງສຖານທີ່ແຫ່ງນຶ່ງໄດ້ສະແດງອາການແຍ້ມ ແມ່ນຫຍັງເປັນເຫຕຸເປັນປັຈຈັຍໃຫ້ທ່ານສະແດງອາການແຍ້ມ" ພຣະມຫາໂມຄຄັລລານະຕອບວ່າ "ທ່ານ ເມື່ອຜູ້ຂ້າລົງຈາກພູເຂົາຄິຊຢກູຕໄດ້ເຫັນສັຕຕິໂລມເຜດເພສຊາຍລອຍໃນອາກາສ (ຂົນ)ຫອກເຫລົ່ານັ້ນຂອງມັນຫລຸດລອຍຂຶ້ນໄປແລ້ວກັບຕົກລົງທີ່ຮ່າງຂອງມັນເອງຈົນມັນຮ້ອງຄວນຄາງ ຜູ້ຂ້າມີຄວາມຮູ້ສຶກວ່າ ຫນ້າອັສຈັນແທ້ບໍ່ເຄີຍປາກົດ ທີ່ມີສັຕວ໌ເຊັ່ນນີ້ ມີຍັກສ໌ເຊັ່ນນີ້ ມີເຜດເຊັ່ນນີ້ ມີການໄດ້ອັຕພາພ
ເຊັ່ນນີ້ຢູ່" ພິກສຸທັງຫລາຍພາກັນຕຳຫນິ ປະນາມ ໂພນທນາວ່າ "ພຣະມຫາໂມຄຄັລລານະ ກ່າວອວດອຸຕຕຣິ ມນຸສສທັມ" ລຳດັບນັ້ນ ພຣະຜູ້ມີພຣະພາຄຕຣັສຮຽກພິກສຸທັງຫລາຍມາຮັບສັ່ງວ່າ "ພິກສຸທັງຫລາຍ ສາວົກທັງຫລາຍທີ່ມີຈັກສຸຢານກໍຍັງມີຢູ່ ເພາະສາວົກທີ່ຮູ້ທີ່ເຫັນນີ້ເປັນພຍານໄດ້ ເມື່ອກ່ອນເຮົາກໍເຫັນສັຕຕິໂລມເຜດເພສຊາຍນັ້ນແຕ່ບໍ່ພຍາກອນ ເພາະການພຍາກອນນັ້ນຈະບໍ່ເປັນປໂຍດເກື້ອກູລຊ້ຳຈະເປັນທຸກຂ໌ຍາວນານ ແກ່ຜູ້ທີ່ບໍ່ເຊື່ອເຮົາ ພິກສຸທັງຫລາຍ ເຜດນັ້ນເຄີຍເປັນພານລ່າເນື້ອໃນກຸງຣາຊຄຶຫ໌ ເພາະຜົລກັມນັ້ນ ຈຶ່ງຕົກນຣົກ ຫມົກໄຫມ້ຢູ່ຫລາຍຮ້ອຍປີ ຫລາຍພັນປີ ຫລາຍແສນປີແລ້ວໄດ້ມີອັຕພາພເຊັ່ນນີ້ ເພາະເສສກັມທີ່ຍັງເຫລືອ
ໂມຄຄັລລານະກ່າວຈິງຈຶ່ງບໍ່ຕ້ອງອາບັຕິ" (ເຣື່ອງທີ ໔໑)

## ເຣື້ອງອຸສຸໂລມເຜດເພສຊາຍ ໑ ເຣື້ອງ
## (ເຜດຮ່າງມີຂົນເປັນລູກສອນເພສຊາຍ)

ສມັຍນັ້ນ ພຣະຜູ້ມີພຣະພາຄປະທັບ ນະ ພຣະເວຣຸວັນ ສຖານທີ່ໃຫ້ເຫຍື່ອກະແຕ ເຂຕກຸງຣາຊຄຶຫ໌ຄັ້ງນັ້ນ ທ່ານພຣະລັກຂນະກັບພຣະມຫາໂມຄຄັລລານະພັກຢູ່ທີ່ເຂົາຄິຊຢກູຕ ຄັນເວລາເຊົ້າ ພຣະມຫາໂມຄຄັລລານະຄອງອັນຕຣວາສກຖືບາຕຣແລະຈີວອນເຂົ້າໄປຫາພຣະລັກຂນະຈົນເຖິງທີ່ຢູ່ ເຊີນຊວນວ່າ "ທ່ານລັກຂນະ ມາເຖີດ ພວກເຮົາຈະໄປບິນທບາຕໃນກຸງຣາຊຄຶຫ໌ດ້ວຍກັນ" ພຣະລັກຂນະຮັບຄຳແລ້ວ ຂນະທີ່ພຣະມຫາໂມຄຄັລລານະກຳລັງລົງຈາກພູເຂົາຄິຊຢກູຕ ເຖິງສຖານທີ່ແຫ່ງນຶ່ງໄດ້ສະແດງອາການແຍ້ມ ພຣະລັກຂນະຖາມວ່າ "ທ່ານໂມຄຄັລລານະ ແມ່ນຫຍັງເປັນເຫຕຸເປັນປັຈຈັຍໃຫ້ທ່ານສະແດງອາການແຍ້ມ" ພຣະມຫາໂມຄຄັລລານະຕອບວ່າ "ທ່ານລັກຂນະ ຍັງບໍ່ເຖິງເວລາຕອບບັນຫານີ້ ເມື່ອເຂົ້າເຝົ້າພຣະຜູ້ມີພຣະພາຄຄ່ອຍຖາມບັນຫານີ້ເຖີດ"
ຄັນທ່ານທັງ ໒ ທ່ຽວບິນທບາຕໃນກຸງຣາຊຄຶຫ໌ ກັບຈາກບິນທບາຕ ຫລັງຈາກສັນອາຫານ ເຂົ້າໄປ

ເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຖວາຍບັງຄົມແລ້ວນັ່ງລົງ ນະ ທີ່ສົມຄວຣ ຄັນແລ້ວພຣະລັກຂນະໄດ້ກ່າວຂຶ້ນວ່າ "ທ່ານມຫາໂມຄຄັລລານະ ເມື່ອທ່ານລົງຈາກພູເຂົາຄິຊຢກູຕ ໃນກຸງຣາຊຄຶຫ໌ນີ້ ເຖິງສຖານທີ່ແຫ່ງນຶ່ງໄດ້ສະແດງອາການແຍ້ມ ແມ່ນຫຍັງເປັນເຫຕຸເປັນປັຈຈັຍໃຫ້ທ່ານສະແດງອາການແຍ້ມ" ພຣະມຫາໂມຄຄັລລານະຕອບວ່າ "ທ່ານ ເມື່ອຜູ້ຂ້າລົງຈາກພູເຂົາຄິຊຢກູຕໄດ້ເຫັນອຸສຸໂລມເຜດເພສູຊາຍ ລອຍໃນອາກາສູ (ຂນ)ລູກສອນເຫລົ່ານັ້ນຂອງມັນຫລຸດລອຍຂຶ້ນໄປແລ້ວກັບຕົກລົງທີ່ຮ່າງຂອງມັນເອງຈົນມັນຮ້ອງຄວນຄາງ ຜູ້ຂ້າມີ ຄວາມຮູ້ສຶກວ່າ ຫນ້າອັສຈັນແທ້ບໍ່ເຄີຍປາກົດ ທີ່ມີສັຕວ໌ເຊັ່ນນີ້ ມີຍັກສ໌ເຊັ່ນນີ້ ມີເຜດເຊັ່ນນີ້ ມີການໄດ້ອັຕພາພເຊັ່ນນີ້ຢູ່" ພິກສຸທັງຫລາຍພາກັນຕຳຫນິ ປະນາມ ໂພນທະນາວ່າ "ພຣະມຫາໂມຄຄັລລານະກ່າວອວດອຸຕຕຣິ ມນຸສສທັມ"
ລຳດັບນັ້ນ ພຣະຜູ້ມີພຣະພາຄຕຣັສຮຽກພິກສຸທັງຫລາຍມາຮັບສັ່ງວ່າ "ພິກສຸທັງຫລາຍ ສາວົກທັງຫລາຍທີ່ມີຈັກສຸຢານກໍຍັງມີຢູ່ ເພາະສາວົກທີ່ຮູ້ທີ່ເຫັນນີ້ເປັນພຍານໄດ້ ເມື່ອກ່ອນເຮົາກໍເຫັນອຸສຸໂລມເຜດເພສູຊາຍນັ້ນແຕ່ບໍ່ພຍາກອນ ເພາະການພຍາກອນນັ້ນຈະບໍ່ເປັນປໂຍດເກື້ອກູລຊ້ຳຈະເປັນທຸກຂ໌ຍາວດົນແກ່ຜູ້ທີ່ບໍ່ເຊື່ອເຮົາ ພິກສຸທັງຫລາຍ ເຜດນັ້ນເຄີຍເປັນເພ້ຊຄາດຢູ່ໃນກຸງຣາຊຄຶຫ໌ ເພາະຜົລກັມນັ້ນ ຈຶ່ງຕົກນຣົກຫມົກໄຫມ້ຢູ່ຫລາຍຮ້ອຍປີ ຫລາຍພັນປີ ຫລາຍແສນປີແລ້ວໄດ້ມີອັຕພາພເຊັ່ນນີ້ ເພາະເສສກັມທີ່ຍັງເຫລືອ ໂມຄຄັລລານະກ່າວຈິງຈຶ່ງບໍ່ຕ້ອງອາບັຕິ" (ເຣື່ອງທີ ໔໔)

## ເຣື່ອງສູຈິໂລມເຜດເພສູຊາຍ ໑ ເຣື່ອງ
## (ເຜດຮ່າງມີຂົນເປັນເຂັມເພສູຊາຍ)

ສມັຍນັ້ນ ພຣະຜູ້ມີພຣະພາຄປະທັບ ນະ ພຣະເວຣຸວັນ ສຖານທີ່ໃຫ້ເຫຍື່ອກະແຕ ເຂຕກຸງຣາຊຄຶຫ໌ ຄັ້ງນັ້ນ ທ່ານພຣະລັກຂນະກັບພຣະມຫາໂມຄຄັລລານະພັກຢູ່ທີ່ເຂົາຄິຊຢກູຕ ຄັນເວລາເຊົ້າ ພຣະມຫາໂມຄຄັລລານະຄອງອັນຕຣວາສກຖືບາຕຣແລະຈີວອນເຂົ້າໄປຫາພຣະລັກຂນະຈົນເຖິງທີ່ຢູ່ ເຊີນຊວນວ່າ "ທ່ານລັກຂນະ ມາເຖີດ ພວກເຮົາຈະໄປບິນທບາຕໃນກຸງຣາຊຄຶຫ໌ດ້ວຍກັນ" ພຣະລັກຂນະຮັບຄຳແລ້ວ ຂນະທີ່ພຣະມຫາໂມຄຄັລລານະກຳລັງລົງຈາກພູເຂົາຄິຊຢກູຕ ເຖິງສຖານທີ່ແຫ່ງນຶ່ງໄດ້ສະແດງອາການແຍ້ມ ພຣະລັກຂນະຖາມວ່າ "ທ່ານໂມຄຄັລລານະ ແມ່ນຫຍັງເປັນເຫຕຸເປັນປັຈຈັຍໃຫ້ທ່ານສະແດງອາການແຍ້ມ" ພຣະມຫາໂມຄຄັລລານະຕອບວ່າ "ທ່ານລັກຂນະ ຍັງບໍ່ເຖິງເວລາຕອບບັນຫານີ້ ເມື່ອເຂົ້າເຝົ້າພຣະຜູ້ມີພຣະພາຄຄ່ອຍຖາມບັນຫານີ້ເຖີດ"
ຄັນທ່ານທັງ ໔ ທ່ຽວບິນທບາຕໃນກຸງຣາຊຄຶຫ໌ ກັບຈາກບິນທບາຕ ຫລັງຈາກສັນອາຫານ ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຖວາຍບັງຄົມແລ້ວນັ່ງລົງ ນະ ທີ່ສົມຄວຣ ຄັນແລ້ວພຣະ

ລັກຂນະໄດ້ກ່າວຂຶ້ນວ່າ "ທ່ານມຫາໂມຄຄັລລານະ ເມື່ອທ່ານລົງຈາກພູເຂົາຄິຊຢກູຕ ໃນກຸງຣາຊຄຶຫ໌ນີ້ ເຖິງສຖານທີ່ແຫ່ງນຶ່ງໄດ້ສະແດງອາກາຣແຍ້ມ ແມ່ນຫຍັງເປັນເຫຕຸເປັນປັຈຈັຍໃຫ້ທ່ານສະແດງອາກາຣແຍ້ມ" ພຣະມຫາໂມຄຄັລລານະຕອບວ່າ "ທ່ານ ເມື່ອຜູ້ຂ້າລົງຈາກພູເຂົາຄິຊຢກູຕໄດ້ເຫັນສູຈິໂລມເຜດເພສຊາຍ ລອຍໃນອາກາສ (ຂົນ)ເຂັມເຫລົ່ານັ້ນຂອງມັນຫລຸດລອຍຂຶ້ນໄປແລ້ວກັບຕົກລົງທີ່ຮ່າງຂອງມັນເອງຈົນມັນຮ້ອງຄວນຄາງ ຜູ້ຂ້າມີຄວາມຮູ້ສຶກວ່າ ໜ້າອັສຈັນແທ້ບໍ່ເຄີຍປາກົດທີ່ມີສັຕວ໌ເຊັ່ນນີ້ ມີຍັກສ໌ເຊັ່ນນີ້ ມີເຜດເຊັ່ນນີ້ ມີກາຣໄດ້ອັຕພາພເຊັ່ນນີ້ຢູ່" ພິກສຸທັງຫລາຍພາກັນຕຳໜິ ປະນາມ ໂພນທນາວ່າ "ພຣະມຫາໂມຄຄັລລານະ ກ່າວອວດອຸຕຕຣິມນຸສ ສຫັມ" ລຳດັບນັ້ນ ພຣະຜູ້ມີພຣະພາຄຕຣັສຮຽກພິກສຸທັງຫລາຍມາຮັບສັ່ງວ່າ "ພິກສຸທັງຫລາຍ ສາວົກທັງຫລາຍທີ່ມີຈັກສຸຢານກໍຍັງມີຢູ່ ເພາະສາວົກທີ່ຮູ້ທີ່ເຫັນນີ້ເປັນພຍານໄດ້ ເມື່ອກ່ອນເຮົາກໍເຫັນສູຈິໂລມເຜດເພສຊາຍນັ້ນແຕ່ບໍ່ພຍາກອນ ເພາະກາຣພຍາກອນນັ້ນຈະບໍ່ເປັນປໂຍດເກື້ອກູລຊ້ຳຈະເປັນທຸກຂ໌ຍາວດົນແກ່ຜູ້ທີ່ບໍ່ເຊື່ອເຮົາ ພິກສຸທັງຫລາຍ ເຜດນັ້ນເຄີຍເປັນນາຍສາຣຖີຢູ່ໃນກຸງຣາຊຄຶຫ໌ ເພາະຜົລກັມນັ້ນ ຈຶ່ງຕົກນຣົກຫມົກໄໝ້ຢູ່ຫລາຍຮ້ອຍປີ ຫລາຍພັນປີ ຫລາຍແສນປີແລ້ວໄດ້ມີອັຕພາພເຊັ່ນນີ້ ເພາະເສສກັມທີ່ຍັງເຫລືອ ໂມຄຄັລລານະກ່າວຈິງຈຶ່ງບໍ່ຕ້ອງອາບັຕິ" (ເຣື່ອງທີ ໔໕)

## ເຣື່ອງສູຈກເຜດເພສຊາຍ ໑ ເຣື່ອງ
## (ເຜດມີຮ່າງຖືກເຂັມທມຸດທິ່ມແທງເພສຊາຍ)

ສມັຍນັ້ນ ພຣະຜູ້ມີພຣະພາຄປະທັບ ນະ ພຣະເວຣຸວັນ ສຖານທີ່ໃຫ້ເຫຍື່ອກະແຕ ເຂຕກຸງຣາຊຄຶຫ໌ຄັ້ງນັ້ນ ທ່ານພຣະລັກຂນະກັບພຣະມຫາໂມຄຄັລລານະພັກຢູ່ທີ່ເຂົາຄິຊຢກູຕ ຄັນເວລາເຊົ້າ ພຣະມຫາໂມຄຄັລລານະຄອງອັນຕຣວາສກຖືບາຕຣແລະຈີວອນເຂົ້າໄປຫາພຣະລັກຂນະຈົນເຖິງທີ່ຢູ່ ເຊີນຊວນວ່າ "ທ່ານລັກຂນະ ມາເຖີດ ພວກເຮົາຈະໄປບິນທບາຕໃນກຸງຣາຊຄຶຫ໌ດ້ວຍກັນ" ພຣະລັກຂນະຮັບຄຳແລ້ວ ຂນະທີ່ພຣະມຫາໂມຄຄັລລານະກຳລັງລົງຈາກພູເຂົາຄິຊຢກູຕ ເຖິງສຖານທີ່ແຫ່ງນຶ່ງໄດ້ສະແດງອາກາຣແຍ້ມ ພຣະລັກຂນະຖາມວ່າ "ທ່ານໂມຄຄັລລານະ ແມ່ນຫຍັງເປັນເຫຕຸເປັນປັຈຈັຍໃຫ້ທ່ານສະແດງອາກາຣແຍ້ມ" ພຣະມຫາໂມຄຄັລລານະຕອບວ່າ "ທ່ານລັກຂນະ ຍັງບໍ່ເຖິງເວລາຕອບບັນຫານີ້ ເມື່ອເຂົ້າເຝົ້າພຣະຜູ້ມີພຣະພາຄຄ່ອຍຖາມບັນຫານີ້ເຖີດ"

ຄັນທ່ານທັງ ໒ ທ່ຽວບິນທບາຕໃນກຸງຣາຊຄຶຫ໌ ກັບຈາກບິນທບາຕ ຫລັງຈາກສັນອາຫາຣ ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຖວາຍບັງຄົມແລ້ວນັ່ງລົງ ນະ ທີ່ສົມຄວຣ ຄັນແລ້ວພຣະລັກຂນະໄດ້ກ່າວຂຶ້ນວ່າ "ທ່ານມຫາໂມຄຄັລລານະ ເມື່ອທ່ານລົງຈາກພູເຂົາຄິຊຢກູຕ ໃນກຸງຣາຊຄຶຫ໌

ນີ້ ເຖິງສຖານທີ່ແຫ່ງນຶ່ງໄດ້ສະແດງອາການແຍ້ມ ແມ່ນຫຍັງເປັນເຫຕຸເປັນປັຈຈັຍໃຫ້ທ່ານສະແດງອາການແຍ້ມ" ພຣະມຫາໂມຄຄັລລານະຕອບວ່າ "ທ່ານ ເມື່ອຜູ້ຂ້າລົງຈາກພູເຂົາຄິຊຸຢຸກູຕຸໄດ້ເຫັນສູຈກເຜດເພສູຊາຍ ລອຍໃນອາກາສຸ ເຂັມຫມຸດເຫລົ່ານັ້ນແທງເຂົ້າໃນສີສະຂອງມັນຊອດອອກທາງປາກ ແທງເຂົ້າໄປໃນປາກຊອດອອກທາງເອິກ ແທງເຂົ້າໃນເອິກຊອດອອກທາງທ້ອງ ແທງເຂົ້າໃນທ້ອງຊອດອອກທາງຂາອ່ອນທັງ ໔ ແທງເຂົ້າໃນຂາອ່ອນຊອດອອກທາງແຄ່ງທັງ ໔ ແທງເຂົ້າໃນແຄ່ງຊອດອອກທາງຕີນທັງ ໔ ຈົນມັນຮ້ອງຄວນຄາງ ຜູ້ຂ້າມີຄວາມຮູ້ສຶກວ່າ ຫນ້າອັສຈັນແທ້ບໍ່ເຄີຍປາກົດ ທີ່ມີສັຕວ໌ເຊັ່ນນີ້ ມີຍັກສູເຊັ່ນນີ້ ມີເຜດເຊັ່ນນີ້ ມີການໄດ້ອັຕພາພເຊັ່ນນີ້ຢູ່"

ພິກສຸທັງຫລາຍພາກັນຕຳຫນິ ປະນາມ ໂພນທະນາວ່າ "ພຣະມຫາໂມຄຄັລລານະກ່າວອວດອຸຕຕຣິມນຸສສທັມ"

ລຳດັບນັ້ນ ພຣະຜູ້ມີພຣະພາຄຕຣັສຮຽກພິກສຸທັງຫລາຍມາຮັບສັ່ງວ່າ "ພິກສຸທັງຫລາຍ ສາວົກທັງຫລາຍທີ່ມີຈັກສຸຢານກໍຍັງມີຢູ່ ເພາະສາວົກທີ່ຮູ້ທີ່ເຫັນນີ້ເປັນພຍານໄດ້ ເມື່ອກ່ອນເຮົາກໍເຫັນສູຈກເຜດເພສູຊາຍນັ້ນແຕ່ບໍ່ພຍາກອນ ເພາະການພຍາກອນນັ້ນຈະບໍ່ເປັນປໂຍດເກື້ອກູລຊ້ຳຈະເປັນທຸກຂ໌ຍາວດົນແກ່ຜູ້ທີ່ບໍ່ເຊື່ອເຮົາ ພິກສຸທັງຫລາຍ ເຜດນັ້ນເຄີຍເປັນຄົນເວົ້າສໍ່ສຽດຢູ່ໃນກຸງຣາຊຄຶຫ໌ ເພາະຜົລກັມນັ້ນ ຈຶ່ງຕົກນຣົກຫມົກໄຫມ້ຢູ່

ຫລາຍຮ້ອຍປີ ຫລາຍພັນປີ ຫລາຍແສນປີແລ້ວໄດ້ມີອັຕພາພເຊັ່ນນີ້ ເພາະເສສກັມທີ່ຍັງເຫລືອ ໂມຄຄັລລານະກ່າວຈິງຈຶ່ງບໍ່ຕ້ອງອາບັຕິ" (ເຣື່ອງທີ ໔໔)

## ເຣື່ອງກຸມພັນຫຼເຜດ ໑ ເຣື່ອງ
## (ເຜດມີອັນຫຼະໂຕເທົ່າຫມໍ້)

ສມັຍນັ້ນ ພຣະຜູ້ມີພຣະພາຄປະທັບ ນະ ພຣະເວຣຸວັນ ສຖານທີ່ໃຫ້ເຫຍື່ອກະແຕ ເຂຕກຸງຣາຊຄຶຫ໌ ຄັ້ງນັ້ນ ທ່ານພຣະລັກຂນະກັບພຣະມຫາໂມຄຄັລລານະພັກຢູ່ທີ່ເຂົາຄິຊຸຢຸກູຕຸ ຄັນເວລາເຊົ້າ ພຣະມຫາໂມຄຄັລລານະຄອງອັນຕຣວາສກຖືບາຕຣແລະຈີວອນເຂົ້າໄປຫາພຣະລັກຂນະຈົນເຖິງທີ່ຢູ່ ເຊີນຊວນວ່າ "ທ່ານລັກຂນະ ມາເຖີດ ພວກເຮົາຈະໄປບິນທຸບາຕໃນກຸງຣາຊຄຶຫ໌ດ້ວຍກັນ" ພຣະລັກຂນະຮັບຄຳແລ້ວ ຂນະທີ່ພຣະມຫາໂມຄຄັລລານະກຳລັງລົງຈາກພູເຂົາຄິຊຸຢຸກູຕຸ ເຖິງສຖານທີ່ແຫ່ງນຶ່ງໄດ້ສະແດງອາການແຍ້ມ ພຣະລັກຂນະຖາມວ່າ "ທ່ານໂມຄຄັລລານະ ແມ່ນຫຍັງເປັນເຫຕຸເປັນປັຈຈັຍໃຫ້ທ່ານສະແດງອາການແຍ້ມ" ພຣະມຫາໂມຄຄັລລານະຕອບວ່າ "ທ່ານລັກຂນະ ຍັງບໍ່ເຖິງເວລາຕອບບັນຫານີ້ ເມື່ອເຂົ້າເຝົ້າພຣະຜູ້ມີພຣະພາຄຄ່ອຍຖາມບັນຫານີ້ເຖີດ" ຄັນທ່ານທັງ ໔ ຫຽວ

ບິນ຺ທ຺ບາຕໃນກຸງຣາຊຄຶຫ໌ ກັບຈາກບິນ຺ທ຺ບາຕ ຫລັງຈາກສັນອາຫາຣ ເຂົ້າໄປເຝົ້າພຣະຜູ້ມີພຣະພາຄ ເຖິງທີ່ປະທັບ ຖວາຍບັງຄົມແລ້ວນັ່ງລົງ ນ຺ະ ທີ່ສົມຄວຣ ຄັນແລ້ວພຣະລັກຂນ຺ະໄດ້ກ່າວຂຶ້ນວ່າ "ທ່ານມຫາໂມຄຄັລລານະ ເມື່ອທ່ານລົງຈາກພູເຂົາຄິຊຸຢ຺ກູຕ຺ ໃນກຸງຣາຊຄຶຫ໌ນີ້ ເຖິງສຖານທີ່ແຫ່ງ ນຶ່ງໄດ້ສະແດງອາການແຍ້ມ ແມ່ນຫຍັງເປັນເຫຕຸເປັນປັຈຈັຍໃຫ້ທ່ານສະແດງອາການແຍ້ມ" ພຣະ ມຫາໂມຄຄັລລານະຕອບວ່າ "ທ່ານ ເມື່ອຜູ້ຂ້າລົງຈາກພູເຂົາຄິຊຸຢ຺ກູຕ຺ໄດ້ເຫັນກຸນພັນ຺ທ຺ເຜດເພສ຺ ຊາຍ ລອຍໃນອາກາສ຺ ເມື່ອເຜດນັ້ນຍ່າງກໍຍົກອັນ຺ທ຺ະເຫລົ່ານັ້ນຂຶ້ນພາດໄວ້ເທິງບ່າໄປ ເມື່ອນັ່ງກໍ ນັ່ງທັບອັນ຺ທ຺ະເຫລົ່ານັ້ນ ຝູງແຮ້ງ ນົກກາ ແຫລວພາກັນບິນແຊ່ວຢູ່ຂວັກໄຂວ່ຈິກທຶ້ງຍື້ແຍ່ງເຜດ ນັ້ນແກວ່ງໄປມາຈົນມັນຮ້ອງຄວນຄາງ ຜູ້ຂ້າມີຄວາມຮູ້ສຶກວ່າຫນ້າອັສຈັນແທ້ບໍ່ເຄີຍປາກົດ ທີ່ມີ ສັຕວ໌ເຊັ່ນນີ້ ມີຍັກສ໌ເຊັ່ນນີ້ ມີເຜດເຊັ່ນນີ້ ມີກາຣໄດ້ອັຕພາພເຊັ່ນນີ້ຢູ່" ພິກສຸທັງຫລາຍພາກັນ ຕຳຫນິ ປະນາມ ໂພນທະນາວ່າ "ພຣະມຫາໂມຄຄັລລານະກ່າວອວດອຸຕຕຣິມນຸສສທັມ"

ລຳດັບນັ້ນ ພຣະຜູ້ມີພຣະພາຄຕຣັສຮຽກພິກສຸທັງຫລາຍມາຮັບສັ່ງວ່າ "ພິກສຸທັງຫລາຍ ສາວົກທັງ ຫລາຍທີ່ມີຈັກສຸຢ່ານ຺ກໍຍັງມີຢູ່ ເພາະສາວົກທີ່ຮູ້ທີ່ເຫັນນີ້ເປັນພຍານໄດ້ ເມື່ອກ່ອນເຮົາກໍເຫັນກຸນ ພັນ຺ທ຺ເຜດເພສ຺ຊາຍນັ້ນແຕ່ບໍ່ພຍາກອນ ເພາະກາຣພຍາກອນນັ້ນຈະບໍ່ເປັນປໂຍດເກື້ອກູລຊ້ຳຈະເປັນ ທຸກຂ໌ຍາວດົນແກ່ຜູ້ທີ່ບໍ່ເຊື່ອເຮົາ ພິກສຸທັງຫລາຍ ເຜດນັ້ນເຄີຍເປັນຜູ້ພິພາກສາໂກງຊາວບ້ານຢູ່ໃນ ກຸງຣາຊຄຶຫ໌ ເພາະຜົລກັມນັ້ນ ຈຶ່ງຕົກ ນຣົກຫມົກໄຫມ້ຢູ່ຫລາຍຮ້ອຍປີ ຫລາຍພັນປີ ຫລາຍແສນ ປີແລ້ວໄດ້ມີອັຕພາພເຊັ່ນນີ້ ເພາະເສສ຺ກັມທີ່ຍັງເຫລືອ ໂມຄຄັລລານະກ່າວຈິງຈຶ່ງບໍ່ຕ້ອງອາບັຕິ" (ເຣື່ອງທີ ໔໕)

## ເຣື່ອງເຜດຈົມຫລຸມຄູຖເພສ຺ຊາຍ ໑ ເຣື່ອງ

ສມັຍນັ້ນ ພຣະຜູ້ມີພຣະພາຄປະທັບ ນ຺ະ ພຣະເວຮຸວັນ ສຖານທີ່ໃຫ້ເຫຍື່ອກະແຕ ເຂຕກຸງຣາຊຄຶຫ໌ ຄັ້ງນັ້ນ ທ່ານພຣະລັກຂນ຺ະກັບພຣະມຫາໂມຄຄັລລານະພັກຢູ່ທີ່ເຂົາຄິຊຸຢ຺ກູຕ຺ ຄັນເວລາເຊົ້າ ພຣະ ມຫາໂມຄຄັລລານະຄອງອັນຕຣວາສກຖືບາຕຣແລະຈີວອນເຂົ້າໄປຫາພຣະລັກຂນ຺ະຈົນເຖິງທີ່ຢູ່ ເຊີນ ຊວນວ່າ "ທ່ານລັກຂນ຺ະ ມາເຖີດ ພວກເຮົາຈະໄປບິນ຺ທ຺ບາຕໃນກຸງຣາຊຄຶຫ໌ດ້ວຍກັນ" ພຣະລັກຂນ຺ະ ຮັບຄຳແລ້ວ ຂນ຺ະທີ່ພຣະມຫາໂມຄຄັລລານະກຳລັງລົງຈາກພູເຂົາຄິຊຸຢ຺ກູຕ຺ ເຖິງສຖານທີ່ແຫ່ງນຶ່ງໄດ້ ສະແດງອາການແຍ້ມ ພຣະລັກຂນ຺ະຖາມວ່າ "ທ່ານໂມຄຄັລລານະ ແມ່ນຫຍັງເປັນເຫຕຸເປັນປັຈຈັຍ ໃຫ້ທ່ານສະແດງອາການແຍ້ມ" ພຣະມຫາໂມຄຄັລລານະຕອບວ່າ "ທ່ານລັກຂນ຺ະ ຍັງບໍ່ເຖິງເວລາ ຕອບບັນຫານີ້ ເມື່ອເຂົ້າເຝົ້າພຣະຜູ້ມີພຣະພາຄຄ່ອຍຖາມບັນຫານີ້ເຖີດ" ຄັນທ່ານທັງ ໒ ທຽວ

ບິນ຺ຫ຺ບາຕໃນກຸງຣາຊຄຶຫ໌ ກັບຈາກບິນ຺ຫ຺ບາຕ ຫລັງຈາກສັນອາຫານ ເຂົ້າໄປເຝົ້າພຣະຜູ້ມີພຣະພ຺າຄ ເຖິງທີ່ປະທັບ ຖວາຍບັງຄົມແລ້ວນັ່ງລົງ ນ຺ະ ທີ່ສົມຄວຣ ຄັນແລ້ວພຣະລັກຂນ຺ະໄດ້ກ່າວຂຶ້ນວ່າ "ທ່ານມຫາໂມຄຄັລລານະ ເມື່ອທ່ານລົງຈາກພູເຂົາຄິຊຢ຺ກູຕ຺ ໃນກຸງຣາຊຄຶຫ໌ນີ້ ເຖິງສຖານທີ່ແຫ່ງນຶ່ງໄດ້ສະແດງອາການແຍ້ມ ແມ່ນຫຍັງເປັນເຫຕຸເປັນປັຈຈັຍໃຫ້ທ່ານສະແດງອາການແຍ້ມ" ພຣະມຫາໂມຄຄັລລານະຕອບວ່າ "ທ່ານ ເມື່ອຜູ້ຂ້າລົງຈາກພູເຂົາຄິຊຢ຺ກູຕ຺ ໄດ້ເຫັນເຜດຈມຫລຸມຄູຖຈນມິດສີ຺ສະ ເພສ຺ຊາຍ ລອຍໃນອາກາສ຺ ຝູງແຮ້ງ ນົກກາ ແຫລວພາກັນບິນແຊ່ວຢູ່ຂວັກໄຂວ່ຈິກທຶ້ງຍື້ແຍ່ງເຜດນັ້ນແກວ່ງໄປມາຈົນມັນຮ້ອງຄວນຄາງ ຜູ້ຂ້າມີຄວາມຮູ້ສຶກວ່າ ຫນ້າອັສຈັນແທ້ບໍ່ເຄີຍປາກົດ ທີ່ມີສັຕວ໌ເຊັ່ນນີ້ ມີຍັກສ຺ເຊັ່ນນີ້ ມີເຜດເຊັ່ນນີ້ ມີການໄດ້ອັຕພ຺າພເຊັ່ນນີ້ຢູ່" ພ຺ິກສ຺ຸທັງຫລາຍພາກັນຕຳຫນິ ປະນາມ ໂພນທະນາວ່າ "ພຣະມຫາໂມຄຄັລລານະ ກ່າວອວດອຸຕຕຣິມນຸສສທ຺ັມ" ລຳດັບນັ້ນ ພຣະຜູ້ມີພຣະພ຺າຄຕຣັສຮຽກພ຺ິກສ຺ຸທັງຫລາຍມາຮັບສັ່ງວ່າ "ພ຺ິກສ຺ຸທັງຫລາຍສາວົກທັງຫລາຍທີ່ມີຈັກສ຺ຸຢານ຺ກໍຍັງມີຢູ່ ເພາະສາວົກທີ່ຮູ້ທີ່ເຫັນນີ້ເປັນພຍານໄດ້ ເມື່ອກ່ອນເຮົາກໍເຫັນເຜດຈມຫລຸມຄູຖເພສ຺ຊາຍນັ້ນແຕ່ບໍ່ພຍາກອນ ເພາະການພຍາກອນນັ້ນຈະບໍ່ເປັນປໂຍດເກື້ອກູລຊ້ຳຈະເປັນທຸກຂ໌ຍາວດົນແກ່ຜູ້ທີ່ບໍ່ເຊື່ອເຮົາ ພ຺ິກສ຺ຸທັງຫລາຍ ເຜດນັ້ນເຄີຍເປັນຊູ້ກັບພ຺ັຣຍາຂອງຊາຍອື່ນຢູ່ໃນກຸງຣາຊຄຶຫ໌ ເພາະ ຜົລກັມນັ້ນ ຈຶ່ງຕົກນຣົກຫມົກໄຫມ້ຢູ່ຫລາຍຮ້ອຍປີ ຫລາຍພັນປີຫລາຍແສນປີແລ້ວໄດ້ມີອັຕພ຺າພເຊັ່ນນີ້ ເພາະເສ຺ສ຺ກັມທີ່ຍັງເຫລືອ ໂມຄຄັລລານະກ່າວຈິງຈຶ່ງບໍ່ຕ້ອງອາບັຕິ" (ເຣື່ອງທີ ໔໙)

## ເຣື້ອງເຜດກິນຄູຖເພສ຺ຊາຍ ໑ ເຣື້ອງ

ສມັຍນັ້ນ ພຣະຜູ້ມີພຣະພ຺າຄປະທັບ ນ຺ະ ພຣະເວຣ຺ຸວັນ ສຖານທີ່ໃຫ້ເຫຍື່ອກະແຕ ເຂຕກຸງຣາຊຄຶຫ໌ ຄັ້ງນັ້ນ

ທ່ານພຣະລັກຂນ຺ະກັບພຣະມຫາໂມຄຄັລລານະພັກຢູ່ທີ່ເຂົາຄິຊຢ຺ກູຕ຺ ຄັນເວລາເຊົ້າ ພຣະມຫາໂມຄຄັລລານະຄອງອັນຕຣວາສກຖືບາຕຣແລະຈີວອນເຂົ້າໄປຫາພຣະລັກຂນ຺ະຈົນເຖິງທີ່ຢູ່ ເຊີນຊວນວ່າ "ທ່ານລັກຂນ຺ະ ມາເຖີດ ພວກເຮົາຈະໄປບິນ຺ຫ຺ບາຕໃນກຸງຣາຊຄຶຫ໌ດ້ວຍກັນ" ພຣະລັກຂນ຺ະຮັບຄຳ

ແລ້ວ ຂນະທີ່ພຣະມຫາໂມຄຄັລລານະກຳລັງລົງຈາກພູເຂົາຄິຊຢູກູຕ ເຖິງສຖານທີ່ແຫ່ງນຶ່ງໄດ້ສະແດງອາການແຍ້ມ ພຣະລັກຂນະຖາມວ່າ "ທ່ານໂມຄຄັລລານະ ແມ່ນຫຍັງເປັນເຫຕຸເປັນປັຈຈັຍໃຫ້ທ່ານສະແດງອາການແຍ້ມ" ພຣະມຫາໂມຄຄັລລານະຕອບວ່າ "ທ່ານລັກຂນະ ຍັງບໍ່ເຖິງເວລາຕອບບັນຫານີ້ ເມື່ອເຂົ້າເຝົ້າພຣະຜູ້ມີພຣະພາຄຄ່ອຍຖາມບັນຫານີ້ເຖີດ" ຄັນທ່ານທັງ ໒ ທຽວບິນທບາຕໃນກຸງຣາຊຄຶຫ໌ ກັບຈາກບິນທບາຕ ຫລັງຈາກສັນອາຫານ ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຖວາຍບັງຄົມແລ້ວນັ່ງລົງ ນະ ທີ່ສົມຄວຣ ຄັນແລ້ວພຣະລັກຂນະໄດ້ກ່າວຂຶ້ນວ່າ "ທ່ານມຫາໂມຄຄັລລານະ ເມື່ອທ່ານລົງຈາກພູເຂົາຄິຊຢູກູຕ ໃນກຸງຣາຊຄຶຫ໌ນີ້ ເຖິງສຖານທີ່ແຫ່ງນຶ່ງໄດ້ສະແດງອາການແຍ້ມ ແມ່ນຫຍັງເປັນເຫຕຸເປັນປັຈຈັຍໃຫ້ທ່ານສະແດງອາການແຍ້ມ" ພຣະມຫາໂມຄຄັລລານະຕອບວ່າ "ທ່ານ ເມື່ອຜູ້ຂ້າລົງຈາກພູເຂົາຄິຊຢູກູຕ ໄດ້ເຫັນເຜດຜູ້ຈົມຫລຸມຄູຖຫ້ອມສີສະກຳລັງໃຊ້ມືທັງ ໒ ກອບຄູຖກິນເພສສຊາຍ ລອຍໃນອາກາສ ຝູງແຮ້ງ ນົກກາ ແຫລວພາກັນບິນແຊ່ວຢູ່ຂວັກໄຂວ່ຈິກທຶ້ງຍື້ແຍ່ງເຜດນັ້ນແກວ່ງໄປມາຈົນມັນຮ້ອງຄວນຄາງ ຜູ້ຂ້າມີຄວາມຮູ້ສຶກວ່າຫນ້າອັສຈັນແທ້ບໍ່ເຄີຍປາກົດ ທີ່ມີສັຕວ໌ ເຊັ່ນນີ້ ມີຍັກສ໌ເຊັ່ນນີ້ ມີເຜດເຊັ່ນນີ້ ມີການໄດ້ອັຕພາພເຊັ່ນນີ້ຢູ່" ພິກສຸທັງຫລາຍພາກັນຕຳຫນິ ປະນາມ ໂພນທະນາວ່າ "ພຣະມຫາໂມຄຄັລລານະກ່າວອວດອຸຕຕຣິມນຸສສທັມ" ລຳດັບນັ້ນ ພຣະຜູ້ມີພຣະພາຄຕຣັສຮຽກພິກສຸທັງຫລາຍມາຮັບສັ່ງວ່າ "ພິກສຸທັງຫລາຍ ສາວົກທັງຫລາຍທີ່ມີຈັກສຸຢານກໍຍັງມີຢູ່ ເພາະສາວົກທີ່ຮູ້ທີ່ເຫັນນີ້ເປັນພຍານໄດ້ ເມື່ອກ່ອນເຮົາກໍເຫັນເຜດກິນຄູຖເພສສຊາຍນັ້ນແຕ່ບໍ່ພຍາກອນ ເພາະການພຍາ ກອນນັ້ນ ຈະບໍ່ເປັນປໂຍດເກື້ອກູລຊ້ຳຈະເປັນທຸກຂ໌ຍາວດົນແກ່ຜູ້ທີ່ບໍ່ເຊື່ອເຮົາ ພິກສຸທັງຫລາຍ ເຜດນັ້ນເຄີຍເປັນພຣາມນ໌ຊື່ວຮ້າຍຢູ່ໃນກຸງຣາຊຄຶຫ໌ ຄັ້ງສາສນາພຣະກັສສປສັມມາສັມພຸທທເຈົ້າ ພຣາມນ໌ນັ້ນນິມົນຕ໌ພິກສຸສົງຂ໌ສັນພັຕຕາຫານແລ້ວເທຄູຖລົງໃສ່ຮາງຈົນເຕັມ ສັ່ງໃຫ້ບອກເວລາອາຫານວ່າ ຂໍທ່ານຜູ້ຈະເຣີນທັງຫລາຍຈົ່ງສັນອາຫານແລະນຳໄປໃຫ້ພໍແກ່ຄວາມຕ້ອງການຈາກທີ່ນີ້ ເພາະຜົລກັມນັ້ນຈຶ່ງຕົກນຣົກຫມົກໄຫມ້ຢູ່ຫລາຍຮ້ອຍປີ ຫລາຍພັນປີ ຫລາຍແສນປີ ແລ້ວໄດ້ຮັບອັຕພາພເຊັ່ນນີ້ເພາະເສສສກັມນັ້ນ ໂມຄຄັລລານະກ່າວຈິງຈຶ່ງບໍ່ຕ້ອງອາບັຕິ" (ເຣື່ອງທີ ໔໗)

## ເຣື່ອງນິຈສວິເຜດເພສຍິງ ໑ ເຣື່ອງ
## (ເຜດຮ່າງບໍ່ມີຜິວຫນັງເພສຍິງ)

[໔໖໐] ສມັຍນັ້ນ ພຣະຜູ້ມີພຣະພາຄປະທັບ ນະ ພຣະເວລຸວັນ ສຖານທີ່ໃຫ້ເຫຍື່ອກະແຕ ເຂຕກຸງຣາຊຄຶຫ໌ ຄັ້ງນັ້ນ ທ່ານພຣະລັກຂນະກັບພຣະມຫາໂມຄຄັລລານະພັກຢູ່ທີ່ເຂົາຄິຊຢູກູຕ ຄັນເວລາເຊົ້າ

ພຣະມຫາໂມຄຄັລລານະຄອງອັນຕຣວາສກຖືບາຕຣແລະຈີວອນເຂົ້າໄປຫາພຣະລັກຂນະຈົນເຖິງທີ່ຢູ່ເຊີນຊວນວ່າ "ທ່ານລັກຂນະ ມາເຖີດ ພວກເຮົາຈະໄປບິນທບາຕໃນກຸງຣາຊຄຶຫ໌ດ້ວຍກັນ" ພຣະລັກຂນະຮັບຄຳແລ້ວ ຂນະທີ່ພຣະມຫາໂມຄຄັລລານະກຳລັງລົງຈາກພູເຂົາຄິຊຢກູຕ ເຖິງສຖານທີ່ແຫ່ງນຶ່ງໄດ້ສະແດງອາການແຍ້ມ ພຣະລັກຂນະຖາມວ່າ "ທ່ານໂມຄຄັລລານະ ແມ່ນຫຍັງເປັນເຫຕຸເປັນປັຈຈັຍໃຫ້ທ່ານສະແດງອາການແຍ້ມ" ພຣະມຫາໂມຄຄັລລານະ ຕອບວ່າ "ທ່ານລັກຂນະ ຍັງບໍ່ເຖິງເວລາຕອບບັນຫານີ້ ເມື່ອເຂົ້າເຝົ້າພຣະຜູ້ມີພຣະພາຄຄ່ອຍຖາມບັນຫານີ້ເຖີດ"

ຄັນທ່ານທັງ ໒ ທ່ຽວບິນທບາຕໃນກຸງຣາຊຄຶຫ໌ ກັບຈາກບິນທບາຕ ຫລັງຈາກສັນອາຫາຣ ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຖວາຍບັງຄົມແລ້ວນັ່ງລົງ ນະ ທີ່ສົມຄວຣ ຄັນແລ້ວພຣະລັກຂນະໄດ້ກ່າວຂຶ້ນວ່າ "ທ່ານມຫາໂມຄຄັລລານະ ເມື່ອທ່ານລົງຈາກພູເຂົາຄິຊຢກູຕ ໃນກຸງຣາຊຄຶຫ໌ນີ້ ເຖິງສຖານທີ່ແຫ່ງນຶ່ງໄດ້ສະແດງອາການແຍ້ມ ແມ່ນຫຍັງເປັນເຫຕຸເປັນປັຈຈັຍໃຫ້ທ່ານສະແດງອາການແຍ້ມ" ພຣະມຫາໂມຄຄັລລານະຕອບວ່າ "ທ່ານເມື່ອຜູ້ຂ້າລົງຈາກພູເຂົາຄິຊຢກູຕໄດ້ເຫັນນິຈສວິເຜດເພສຊຍິງ ລອຍໃນອາກາສ ຝູງແຮ້ງ ນົກກາ ແຫລວພາກັນບິນແຂ່ອຢູ່ຂວັກໄຂວ່ຈິກທິ້ງຍື້ແຍ່ງເຜດນັ້ນແກວ່ງໄປມາຈົນມັນຮ້ອງຄວນຄາງ ຜູ້ຂ້າມີຄວາມຮູ້ສຶກວ່າ ຫນ້າອັສຈັນແທ້ບໍ່ເຄີຍປາກົດ ທີ່ມີສັຕວ໌ເຊັ່ນນີ້ ມີຍັກສ໌ເຊັ່ນນີ້ ມີເຜດເຊັ່ນນີ້ ມີການໄດ້ອັຕພາພເຊັ່ນນີ້ຢູ່" ພິກສຸທັງຫລາຍພາກັນຕຳໜິ ປະນາມ ໂພນທນາວ່າ "ພຣະມຫາໂມຄຄັລລານະກ່າວອວດອຸຕຕຣິມນຸສສທັມ"

ລຳດັບນັ້ນ ພຣະຜູ້ມີພຣະພາຄຕຣັສຮຽກພິກສຸທັງຫລາຍມາຮັບສັ່ງວ່າ "ພິກສຸທັງຫລາຍ ສາວົກທັງຫລາຍທີ່ມີຈັກສຸຢານກໍຍັງມີຢູ່ ເພາະສາວົກທີ່ຮູ້ທີ່ເຫັນນີ້ເປັນພຍານໄດ້ ເມື່ອກ່ອນເຮົາກໍເຫັນນິຈສວິເຜດເພສຊຍິງນັ້ນແຕ່ບໍ່ພຍາກອນ ເພາະການພຍາກອນນັ້ນຈະບໍ່ເປັນປໂຍດເກື້ອກູລຊ້ຳຈະເປັນທຸກຂ໌ຍາວດົນແກ່ຜູ້ທີ່ບໍ່ເຊື່ອເຮົາ ພິກສຸທັງຫລາຍ ເຜດຍິງຕົນນັ້ນເຄີຍປະພຶດນອກໃຈສາມີຢູ່ໃນກຸງຣາຊຄຶຫ໌ ເພາະຜົລກັມນັ້ນ ຈຶ່ງຕົກນຣົກຫລາຍປີ ຫລາຍພັນປີ ຫລາຍແສນປີແລ້ວໄດ້ມີອັຕພາພເຊັ່ນນີ້ ເພາະເສສກັມທີ່ຍັງເຫລືອ ໂມຄຄັລລານະກ່າວຈິງຈຶ່ງບໍ່ຕ້ອງອາບັຕິ" (ເຣື່ອງທີ ໔໗)

## ເຣື່ອງມັງຄຸລິເຜດເພສຊຍິງ ໑ ເຣື່ອງ
## (ເຜດຮູບຮ່າງຫນ້າກຽດເພສຊຍິງ)

ສມັຍນັ້ນ ພຣະຜູ້ມີພຣະພາຄປະທັບ ນະ ພຣະເວຣຸວັນ ສຖານທີ່ໃຫ້ເຫຍື່ອກະແຕ ເຂຕກຸງຣາຊຄຶຫ໌ຄັ້ງນັ້ນ ທ່ານພຣະລັກຂນະກັບພຣະມຫາໂມຄຄັລລານະພັກຢູ່ທີ່ເຂົາຄິຊຢກູຕ ຄັນເວລາເຊົ້າ ພຣະ

ມຫາໂມຄຄັລລານະຄອງອັນຕຣວາສກຖືບາຕຣແລະຈີວອນເຂົ້າໄປຫາພຣະລັກຂນະຈົນເຖິງທີ່ຢູ່ ເຊີນຊວນວ່າ "ທ່ານລັກຂນະ ມາເຖີດ ພວກເຮົາຈະໄປບິນທບາຕໃນກຸງຣາຊຄືຫ໌ດ້ວຍກັນ" ພຣະລັກຂນະຮັບຄຳແລ້ວ ຂນະທີ່ພຣະມຫາໂມຄຄັລລານະກຳລັງລົງຈາກພູເຂົາຄິຊຸຢກູຕ ເຖິງສຖານທີ່ແຫ່ງນຶ່ງໄດ້ສະແດງອາການແຍ້ມ ພຣະລັກຂນະຖາມວ່າ "ທ່ານໂມຄຄັລລານະ ແມ່ນຫຍັງເປັນເຫຕຸເປັນປັຈຈັຍໃຫ້ທ່ານສະແດງອາການແຍ້ມ" ພຣະມຫາໂມຄຄັລລານະຕອບວ່າ "ທ່ານລັກຂນະ ຍັງບໍ່ເຖິງເວລາຕອບບັນຫານີ້ ເມື່ອເຂົ້າເຝົ້າພຣະຜູ້ມີພຣະພາຄຄ່ອຍຖາມບັນຫານີ້ເຖີດ"

ຄັນທ່ານທັງ ໒ ທ່ຽວບິນທບາຕໃນກຸງຣາຊຄືຫ໌ ກັບຈາກບິນທບາຕ ຫລັງຈາກສັນອາຫານ ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຖວາຍບັງຄົມແລ້ວນັ່ງລົງ ນະ ທີ່ສົມຄວຣ ຄັນແລ້ວພຣະລັກຂນະໄດ້ກ່າວຂຶ້ນວ່າ "ທ່ານມຫາໂມຄຄັລລານະ ເມື່ອທ່ານລົງຈາກພູເຂົາຄິຊຸຢກູຕ ໃນກຸງຣາຊຄືຫ໌ນີ້ ເຖິງສຖານທີ່ແຫ່ງນຶ່ງໄດ້ສະແດງອາການແຍ້ມ ແມ່ນຫຍັງເປັນເຫຕຸເປັນປັຈຈັຍໃຫ້ທ່ານສະແດງອາການແຍ້ມ" ພຣະມຫາໂມຄຄັລລານະຕອບວ່າ "ທ່ານ ເມື່ອຜູ້ຂ້າລົງຈາກພູເຂົາຄິຊຸຢກູຕໄດ້ເຫັນມັງຄຸລີເຜດ ກິ່ນເໝັນ ເພສຍິງ ລອຍໃນອາກາສ ຝູງແຮ້ງ ນົກກາ ແຫລວ ພາກັນບິນແຊ່ວຢູ່ຂວັກໄຂວ່ຈິກທຶ້ງຍື້ແຍ່ງເຜດນັ້ນແກວ່ງໄປມາຈົນມັນຮ້ອງຄວນຄາງ ຜູ້ຂ້າມີຄວາມຮູ້ສຶກວ່າຫນ້າອັສຈັນແທ້ບໍ່ເຄີຍປາກົດ ທີ່ມີສັຕວ໌ເຊັ່ນນີ້ ມີຍັກສ໌ເຊັ່ນນີ້ ມີເຜດເຊັ່ນນີ້ ມີກາຣໄດ້ອັຕພາພເຊັ່ນນີ້ຢູ່" ພິກສຸທັງຫລາຍພາກັນຕຳໜິ ປະນາມ ໂພນທະນາວ່າ "ພຣະມຫາໂມຄຄັລລານະກ່າວອວດອຸຕຕຣິມນຸສສທັມ" ລຳດັບນັ້ນ ພຣະຜູ້ມີພຣະພາຄຕຣັສຮຽກພິກສຸທັງຫລາຍມາຮັບສັ່ງວ່າ "ພິກສຸທັງຫລາຍສາວົກທັງຫລາຍທີ່ມີຈັກສຸຢາມກໍຍັງມີຢູ່ ເພາະສາວົກທີ່ຮູ້ທີ່ເຫັນນີ້ເປັນພຍານໄດ້ເມື່ອກ່ອນເຮົາກໍເຫັນມັງຄຸລີເຜດເພສຍິງນັ້ນແຕ່ບໍ່ພຍາກອນ ເພາະກາຣພຍາກອນນັ້ນຈະບໍ່ເປັນປໂຍດເກື້ອກູລຊ້ຳຈະເປັນທຸກຂ໌ຍາວດົນແກ່ຜູ້ທີ່ບໍ່ເຊື່ອເຮົາ ພິກສຸທັງຫລາຍ ເຜດຍິງຕົນນັ້ນເຄີຍເປັນແມ່ມົດຢູ່ໃນກຸງຣາຊຄືຫ໌ ເພາະຜົລກັມນັ້ນ ຈຶ່ງຕົກນຣົກຫມົກໄຫມ້ຢູ່ຫລາຍຮ້ອຍປີ ຫລາຍພັນປີ ຫລາຍແສນປີແລ້ວໄດ້ມີອັຕພາພເຊັ່ນນີ້ ເພາະເສສກັມທີ່ຍັງເຫລືອ ໂມຄຄັລລານະກ່າວຈິງຈຶ່ງບໍ່ຕ້ອງອາບັຕິ" (ເຣື່ອງທີ ໔໙)

## ເຣື່ອງໂອກິຣິນີເຜດເພສຍິງ ໑ ເຣື່ອງ
## (ເຜດຮ່າງຖືກໄຟລວກເພສຍິງ)

ສມັຍນັ້ນ ພຣະຜູ້ມີພຣະພາຄປະທັບ ນະ ພຣະເວລຸວັນ ສຖານທີ່ໃຫ້ເຫຍື່ອກະແຕ ເຂຕກຸງຣາຊຄືຫ໌ຄັ້ງນັ້ນ ທ່ານພຣະລັກຂນະກັບພຣະມຫາໂມຄຄັລລານະພັກຢູ່ທີ່ເຂົາຄິຊຸຢກູຕ ຄັນເວລາເຊົ້າ ພຣະ

ມຫາໂມຄຄັລລານະຄອງອັນຕຣວາສກຖືບາຕຣແລະຈີວອນເຂົ້າໄປຫາພຣະລັກຂນະຈົນເຖິງທີ່ຢູ່ ເຊີນຊວນວ່າ "ທ່ານລັກຂນະ ມາເຖີດ ພວກເຮົາຈະໄປບິນທບາຕໃນກຸງຣາຊຄຶຫ໌ດ້ວຍກັນ" ພຣະລັກຂນະຮັບຄຳແລ້ວ ຂນະທີ່ພຣະມຫາໂມຄຄັລລານະກຳລັງລົງຈາກພູເຂົາຄິຊຢກູຕ ເຖິງສຖານທີ່ແຫ່ງນຶ່ງໄດ້ສະແດງອາການແຍ້ມ ພຣະລັກຂນະຖາມວ່າ "ທ່ານໂມຄຄັລລານະ ແມ່ນຫຍັງເປັນເຫຕຸເປັນປັຈຈັຍໃຫ້ທ່ານສະແດງອາການແຍ້ມ" ພຣະມຫາໂມຄຄັລລານະ ຕອບວ່າ "ທ່ານລັກຂນະ ຍັງບໍ່ເຖິງເວລາຕອບບັນຫານີ້ ເມື່ອເຂົ້າເຝົ້າພຣະຜູ້ມີພຣະພາຄຄ່ອຍຖາມບັນຫານີ້ເຖີດ" ຄັນທ່ານທັງ ໒ ທ່ຽວບິນທບາຕໃນກຸງຣາຊຄຶຫ໌ ກັບຈາກບິນທບາຕ ຫລັງຈາກສັນອາຫານ ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຖວາຍບັງຄົມແລ້ວນັ່ງລົງ ນະ ທີ່ສົມຄວນ ຄັນແລ້ວພຣະລັກຂນະໄດ້ກ່າວຂຶ້ນວ່າ "ທ່ານມຫາໂມຄຄັລລານະ ເມື່ອທ່ານລົງຈາກພູເຂົາຄິຊຢກູຕ ໃນກຸງຣາຊຄຶຫ໌ນີ້ ເຖິງສຖານທີ່ແຫ່ງນຶ່ງໄດ້ສະແດງອາການແຍ້ມ ແມ່ນຫຍັງເປັນເຫຕຸເປັນປັຈຈັຍໃຫ້ທ່ານສະແດງອາການແຍ້ມ" ພຣະມຫາໂມຄຄັລລານະຕອບວ່າ "ທ່ານເມື່ອຜູ້ຂ້າລົງຈາກພູເຂົາຄິຊຢກູຕ ໄດ້ເຫັນໂອກີຣິນີເຜດເພສຍິງຖືກຖ່ານເພີງເຜົາຮອບຕົວຈົນສຸກເຍີ້ມ ຫຍາດນ້ຳໄຫລຢົດລົງ ລອຍໃນອາກາສ ມັນຮ້ອງຄວນຄາງຟູງແຮ້ງ ນົກກາ ແຫລວພາກັນບິນ ແຊ່ວຢູ່ຂວັກໄຂວ່ຈິກທຶ້ງຍື້ແຍ່ງເຜດນັ້ນແກວ່ງໄປມາຈົນມັນຮ້ອງຄວນຄາງ ຜູ້ຂ້າມີຄວາມຮູ້ສຶກວ່າ ໜ້າອັສຈັນແທ້ ບໍ່ເຄີຍປາກົດທີ່ມີສັຕວ໌ເຊັ່ນນີ້ ມີຍັກສ໌ເຊັ່ນນີ້ມີເຜດເຊັ່ນນີ້ ມີການໄດ້ອັຕພາພເຊັ່ນນີ້ຢູ່" ພິກສຸທັງຫລາຍພາກັນຕຳໜິ ປະນາມ ໂພນທະນາວ່າ "ພຣະມຫາໂມຄຄັລລານະກ່າວອວດອຸຕຕຣິມນຸສສທັມ" ລຳດັບນັ້ນ ພຣະຜູ້ມີພຣະພາຄຕຣັສຮຽກພິກສຸທັງຫລາຍມາຮັບສັ່ງວ່າ "ພິກສຸທັງຫລາຍ ສາວົກທັງຫລາຍທີ່ມີຈັກສຸຢານກໍຍັງມີຢູ່ ເພາະສາວົກທີ່ຮູ້ທີ່ເຫັນນີ້ເປັນພຍານໄດ້ ເມື່ອກ່ອນເຮົາກໍເຫັນໂອກີຣິນີເຜດເພສຍິງນັ້ນແຕ່ບໍ່ພຍາກອນເພາະການພຍາກອນນັ້ນຈະບໍ່ເປັນປໂຍດເກື້ອກູລຊ້ຳຈະເປັນທຸກຂ໌ຍາວດົນແກ່ຜູ້ທີ່ບໍ່ເຊື່ອເຮົາ ພິກສຸທັງຫລາຍ ເຜດຍິງຕົນນັ້ນເຄີຍເປັນພຣະອັຄຣມເຫສີຂອງພຣະເຈົ້າກາລິງຄະ ນາງຂີ້ຫຶງເອົາກະທະນິຖ່ານໄຟຄວກຍິງຄູ່ແຂ່ງ ເພາະຜົລກັມນັ້ນ ຈຶ່ງຕົກນຣົກຫມົກໄຫມ້ຢູ່ຫລາຍຮ້ອຍປີ ຫລາຍພັນປີຫລາຍແສນປີແລ້ວໄດ້ມີອັຕພາພເຊັ່ນນີ້ ເພາະເສສກັມທີ່ຍັງເຫລືອ ໂມຄຄັລລານະກ່າວຈິງຈຶ່ງບໍ່ຕ້ອງອາບັຕິ" (ເຣື່ອງທີ ໕໐)

ເຣື້ອງກພັນທເຜດ ໑ ເຣື້ອງ

(ເຜດສີສະຂາດ)

ສມັຍນັ້ນ ພຣະຜູ້ມີພຣະພາຄປະທັບ ນະ ພຣະເວຣຸວັນ ສຖານທີ່ໃຫ້ເຫຍື່ອກະແຕ ເຂດກຸງຣາຊຄຶຫ໌ ຄັ້ງນັ້ນ ທ່ານພຣະລັກຂນະກັບພຣະມຫາໂມຄຄັລລານະພັກຢູ່ທີ່ເຂົາຄິຊຢກູຕຄັນເວລາເຊົ້າ ພຣະມຫາໂມຄຄັລລານະຄອງອັນຕຣວາສກຖືບາຕຣແລະຈີວອນເຂົ້າໄປຫາພຣະລັກຂນະຈົນເຖິງທີ່ຢູ່ ເຊີນຊວນວ່າ "ທ່ານລັກຂນະ ມາເຖີດ ພວກເຮົາຈະໄປບິນຫຼບາຕໃນກຸງຣາຊຄຶຫ໌ດ້ວຍກັນ" ພຣະລັກຂນະຮັບຄຳແລ້ວ ຂນະທີ່ພຣະມຫາໂມຄຄັລລານະກຳລັງລົງຈາກພູເຂົາຄິຊຢກູຕ ເຖິງສຖານທີ່ແຫ່ງນຶ່ງໄດ້ສະແດງອາກາຣແຍ້ມ ພຣະລັກຂນະຖາມວ່າ "ທ່ານໂມຄຄັລລານະ ແມ່ນຫຍັງເປັນເຫຕຸເປັນປັຈຈັຍໃຫ້ທ່ານສະແດງອາກາຣແຍ້ມ" ພຣະມຫາໂມຄຄັລລານະຕອບວ່າ "ທ່ານລັກຂນະ ຍັງບໍ່ເຖິງເວລາຕອບບັນຫານີ້ ເມື່ອເຂົ້າເຝົ້າພຣະຜູ້ມີພຣະພາຄຄ່ອຍຖາມບັນຫານີ້ເຖີດ" ຄັນທ່ານທັງ ໒ ທ່ຽວບິນຫຼບາຕໃນກຸງຣາຊຄຶຫ໌ ກັບຈາກບິນຫຼບາຕ ຫລັງຈາກສັນອາຫາຣ ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຖວາຍບັງຄົມແລ້ວນັ່ງລົງ ນະ ທີ່ສົມຄວຣ ຄັນແລ້ວພຣະລັກຂນະໄດ້ກ່າວຂຶ້ນວ່າ "ທ່ານມຫາໂມຄຄັລລານະ ເມື່ອທ່ານລົງຈາກພູເຂົາຄິຊຢກູຕ ໃນກຸງຣາຊຄຶຫ໌ນີ້ ເຖິງສຖານທີ່ແຫ່ງນຶ່ງໄດ້ສະແດງ ອາກາຣແຍ້ມ ແມ່ນຫຍັງເປັນເຫຕຸເປັນປັຈຈັຍໃຫ້ທ່ານສະແດງອາກາຣແຍ້ມ" ພຣະມຫາໂມຄຄັລລານະຕອບວ່າ "ທ່ານ ເມື່ອຜູ້ຂ້າລົງຈາກພູເຂົາຄິຊຢກູຕໄດ້ເຫັນກພັນຫຼເຜດລອຍໃນອາກາສ ຕາແລະປາກຂອງມັນຢູ່ທີ່ເອິກ ຝູງແຮ້ງ ນົກກາ ແຫລວພາກັນບິນແຂ່ວຢູ່ຂວັກໄຂວ່ຈິກທຶ້ງຍື້ແຍ່ງເຜດນັ້ນແກວ່ງໄປມາຈົນມັນຮ້ອງຄວນຄາງ ຜູ້ຂ້າມີຄວາມຮູ້ສຶກວ່າ ຫນ້າອັສຈັນແທ້ບໍ່ເຄີຍປາກົດ ທີ່ມີສັຕວ໌ເຊັ່ນນີ້ ມີຍັກສ໌ເຊັ່ນນີ້ ມີເຜດເຊັ່ນນີ້ ມີກາຣໄດ້ອັຕພາພເຊັ່ນນີ້ຢູ່" ພິກສຸທັງຫລາຍພາກັນຕຳຫນິ ປະນາມ ໂພນທະນາວ່າ "ພຣະມຫາໂມຄຄັລລານະ ກ່າວອວດອຸຕຕຣິມນຸສສທັມ" ລຳດັບນັ້ນ ພຣະຜູ້ມີພຣະພາຄຕຣັສຮຽກພິກສຸທັງຫລາຍມາຮັບສັ່ງວ່າ "ພິກສຸທັງຫລາຍ ສາວົກທັງຫລາຍທີ່ມີຈັກສຸຢານກໍຍັງມີຢູ່ ເພາະສາວົກທີ່ຮູ້ທີ່ເຫັນນີ້ເປັນພຍານໄດ້ ເມື່ອກ່ອນເຮົາກໍເຫັນກພັນຫຼເຜດນັ້ນແຕ່ບໍ່ພຍາກອນ ເພາະກາຣພຍາກອນນັ້ນຈະບໍ່ເປັນປໂຍດເກື້ອກູລຊ້ຳຈະເປັນທຸກຂ໌ຍາວດົນແກ່ຜູ້ທີ່ບໍ່ເຊື່ອເຮົາ ພິກສຸທັງຫລາຍ ເຜດນັ້ນເຄີຍເປັນເພັຊຄາດຂ້າໂຈຣຊື່ອທານຣິກະຢູ່ໃນກຸງຣາຊຄຶຫ໌ ເພາະຜົລກັມນັ້ນ ຈຶ່ງຕົກນຣົກຫມົກໄຫມ້ຢູ່ຫລາຍຮ້ອຍປີ ຫລາຍພັນປີ ຫລາຍແສນປີແລ້ວໄດ້ມີອັຕພາພເຊັ່ນນີ້ ເພາະເສຸສກັມທີ່ຍັງເຫລືອ ໂມຄຄັລລານະກ່າວຈິງຈຶ່ງບໍ່ຕ້ອງອາບັຕິ" (ເຣື່ອງທີ ໕໑)

ພຣະວິນັຍປິດົກ ມຫາວິພັງຄ໌ [໑. ປາຣາຊິກກັນຫ໌] ປາຣາຊິກສິກຂາບົທທີ ໔ ວິນີຕວັຕຖຸ

ເຣື່ອງນັກບວຊທຳກັມຊົ່ວໃນສາສນາຂອງພຣະພຸທທເຈົ້າກັສສປະ ໕ ເຣື່ອງ ຄື

# ເຣື່ອງເຜດມີຮູບເປັນພິກສຸ ໑ ເຣື່ອງ

ສມັຍນັ້ນ ພຣະຜູ້ມີພຣະພາຄປະທັບ ນະ ພຣະເວຣຸວັນ ສຖານທີ່ໃຫ້ເຫຍື່ອກະແຕ ເຂຕກຸງຣາຊຄຶຫ໌ ຄັ້ງນັ້ນ ທ່ານພຣະລັກຂນະກັບພຣະມຫາໂມຄຄັລລານະພັກຢູ່ທີ່ເຂົາຄິຊຢກູຕ ຄັນເວລາເຊົ້າ ພຣະມຫາໂມຄຄັລລານະຄອງອັນຕຣວາສກຖືບາຕຣແລະຈີວອນເຂົ້າໄປຫາພຣະລັກຂນະຈົນເຖິງທີ່ຢູ່ ເຊີນຊວນວ່າ "ທ່ານລັກຂນະ ມາເຖີດ ພວກເຮົາຈະໄປບິນທບາຕໃນກຸງຣາຊຄຶຫ໌ດ້ວຍກັນ" ພຣະລັກຂນະຮັບຄຳແລ້ວ ຂນະທີ່ພຣະມຫາໂມຄຄັລລານະກຳລັງລົງຈາກພູເຂົາຄິຊຢກູຕ ເຖິງສຖານທີ່ແຫ່ງນຶ່ງໄດ້ສະແດງອາກາຣແຍ້ມ ພຣະລັກຂນະຖາມວ່າ "ທ່ານໂມຄຄັລລານະ ແມ່ນຫຍັງເປັນເຫຕຸເປັນປັຈຈັຍໃຫ້ທ່ານສະແດງອາກາຣແຍ້ມ" ພຣະມຫາໂມຄຄັລລານະຕອບວ່າ "ທ່ານລັກຂນະ ຍັງບໍ່ເຖິງເວລາຕອບບັນຫານີ້ ເມື່ອເຂົ້າເຝົ້າພຣະຜູ້ມີພຣະພາຄຄ່ອຍຖາມບັນຫານີ້ເຖີດ"

ຄັນທ່ານທັງ ໒ ທຽວບິນທບາຕໃນກຸງຣາຊຄຶຫ໌ ກັບຈາກບິນທບາຕ ຫລັງຈາກສັນອາຫາຣ ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຖວາຍບັງຄົມແລ້ວນັ່ງລົງ ນະ ທີ່ສົມຄວຣ ຄັນແລ້ວພຣະລັກຂນະໄດ້ກ່າວຂຶ້ນວ່າ "ທ່ານມຫາໂມຄຄັລລານະ ເມື່ອທ່ານລົງຈາກພູເຂົາຄິຊຢກູຕ ໃນກຸງຣາຊຄຶຫ໌ນີ້ ເຖິງສຖານທີ່ແຫ່ງນຶ່ງໄດ້ສະແດງອາກາຣແຍ້ມ ແມ່ນຫຍັງເປັນເຫຕຸເປັນປັຈຈັຍໃຫ້ທ່ານສະແດງອາກາຣແຍ້ມ" ພຣະມຫາໂມຄຄັລລານະຕອບວ່າ "ທ່ານ ເມື່ອຜູ້ຂ້າລົງຈາກພູເຂົາຄິຊຢກູຕ ໄດ້ເຫັນພິກສຸເຜດລອຍໃນອາກາສ ສັງຂາຕິ ບາຕຣ ປຣະຄຕແອວ ແລະຮ່າງກາຍຂອງມັນຖືກໄຟຕິດລຸກໂຊນຈົນມັນຮ້ອງຄວນຄາງ ຜູ້ຂ້າມີຄວາມຮູ້ສຶກວ່າ ຫນ້າອັສຈັນແທ້ບໍ່ເຄີຍປາກົດ ທີ່ມີສັຕວ໌ເຊັ່ນນີ້ ມີຍັກສ໌ເຊັ່ນນີ້ ມີເຜດເຊັ່ນນີ້ ມີກາຣໄດ້ອັຕພາພເຊັ່ນນີ້ຢູ່" ພິກສຸທັງຫລາຍພາກັນຕຳຫນິ ປະນາມໂພນທນາວ່າ "ພຣະມຫາໂມຄຄັລລານະກ່າວອວດອຸຕຕຣິມນຸສສທັມ" ລຳດັບນັ້ນ ພຣະຜູ້ມີພຣະພາຄຕຣັສຮຽກພິກສຸທັງຫລາຍມາຮັບສັ່ງວ່າ "ພິກສຸທັງຫລາຍ ສາວົກທັງຫລາຍທີ່ມີຈັກສຸຢານກໍຍັງມີຢູ່ ເພາະສາວົກທີ່ຮູ້ທີ່ເຫັນນີ້ເປັນພຍານໄດ້ ເມື່ອກ່ອນເຮົາກໍເຫັນພິກສຸເຜດນັ້ນແຕ່ບໍ່ພຍາກອນ ເພາະກາຣ ພຍາກອນນັ້ນຈະບໍ່ເປັນປໂຍດເກື້ອກູລຊ້ຳຈະເປັນທຸກຂ໌ຍາວນານ ແກ່ຜູ້ທີ່ບໍ່ເຊື່ອເຮົາ ພິກສຸທັງຫລາຍ ເຜດນັ້ນເຄີຍເປັນພິກສຸຊື່ວໃນສາສນາພຣະກັສສປສັມມາສັມພຸທທເຈົ້າ ເພາະຜົລກັມນັ້ນຈຶ່ງຕົກນຣົກຫມົກໄຫມ້ຢູ່ ຫລາຍຮ້ອຍປີ ຫລາຍພັນປີ ຫລາຍແສນປີແລ້ວໄດ້ມີອັຕພາພເຊັ່ນນີ້ ເພາະເສສກັມທີ່ຍັງເຫລືອ ໂມຄຄັລລານະກ່າວຈິງຈຶ່ງບໍ່ຕ້ອງອາບັຕິ" (ເຣື່ອງທີ ໕໔)

## ເຣື່ອງເຜດມີຮູບເປັນພິກສຸນີ ໑ ເຣື່ອງ

ສມັຍນັ້ນ ພຣະຜູ້ມີພຣະພາຄປະທັບ ນະ ພຣະເວຣຸວັນ ສຖານທີ່ໃຫ້ເຫຍື່ອກະແຕ ເຂຕກຸງຣາຊຄຶຫ໌ ຄັ້ງນັ້ນ ທ່ານພຣະລັກຂນະກັບພຣະມຫາໂມຄຄັລລານະພັກຢູ່ທີ່ເຂົາຄິຊຢກູຕ ຄັນເວລາເຊົ້າ ພຣະມຫາໂມຄຄັລລານະຄອງອັນຕຣວາສກຖືບາຕຣແລະຈີວອນເຂົ້າໄປຫາພຣະລັກຂນະຈົນເຖິງທີ່ຢູ່ ເຊີນຊວນວ່າ "ທ່ານລັກຂນະ ມາເຖີດ ພວກເຮົາຈະໄປບິນຫບາຕໃນກຸງຣາຊຄຶຫ໌ດ້ວຍກັນ" ພຣະລັກຂນະຮັບຄຳແລ້ວ ຂນະທີ່ພຣະມຫາໂມຄຄັລລານະກຳລັງລົງຈາກພູເຂົາຄິຊຢກູຕ ເຖິງສຖານທີ່ແຫ່ງນຶ່ງໄດ້ສະແດງອາການແຍ້ມ ພຣະລັກຂນະຖາມວ່າ "ທ່ານໂມຄຄັລລານະ ແມ່ນຫຍັງເປັນເຫຕຸເປັນປັຈຈັຍໃຫ້ທ່ານສະແດງອາການແຍ້ມ" ພຣະມຫາໂມຄຄັລລານະຕອບວ່າ "ທ່ານລັກຂນະ ຍັງບໍ່ເຖິງເວລາຕອບບັນຫານີ້ ເມື່ອເຂົ້າເຝົ້າພຣະຜູ້ມີພຣະພາຄຄ່ອຍຖາມບັນຫານີ້ເຖີດ" ຄັນທ່ານທັງ ໒ ທຽວບິນຫບາຕໃນກຸງຣາຊຄຶຫ໌ ກັບຈາກບິນຫບາຕ ຫລັງຈາກສັນອາຫາຣ ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຖວາຍບັງຄົມແລ້ວນັ່ງລົງ ນະ ທີ່ສົມຄວຣ ຄັນແລ້ວພຣະລັກຂນະໄດ້ກ່າວຂຶ້ນວ່າ "ທ່ານມຫາໂມຄຄັລລານະ ເມື່ອທ່ານລົງຈາກພູເຂົາຄິຊຢກູຕ ໃນກຸງຣາຊຄຶຫ໌ນີ້ ເຖິງສຖານທີ່ແຫ່ງນຶ່ງໄດ້ສະແດງອາການແຍ້ມ ແມ່ນຫຍັງເປັນເຫຕຸເປັນປັຈຈັຍໃຫ້ທ່ານສະແດງອາການແຍ້ມ" ພຣະມຫາໂມຄຄັລລານະຕອບວ່າ "ທ່ານ ເມື່ອຜູ້ຂ້າລົງຈາກພູເຂົາຄິຊຢກູຕ ໄດ້ເຫັນພິກສຸນີເຜດລອຍໃນອາກາສ ສັງຂາຕິ ບາຕຣ ປຣະຄຕແອວ ແລະຮ່າງກາຍຂອງມັນຖືກໄຟຕິດລຸກໂຊນ ຈົນມັນຮ້ອງຄວນຄາງ ຜູ້ຂ້າມີຄວາມຮູ້ສຶກວ່າ ໜ້າ ອັສຈັນແທ້ບໍ່ເຄີຍປາກົດທີ່ມີສັຕວ໌ເຊັ່ນນີ້ ມີຍັກສ໌ເຊັ່ນນີ້ ມີເຜດເຊັ່ນນີ້ ມີກາຣໄດ້ອັຕພາພເຊັ່ນນີ້ຢູ່" ພິກສຸທັງຫລາຍພາກັນຕຳໜິ ປະນາມ ໂພນທະນາວ່າ "ພຣະມຫາໂມຄຄັລລານະກ່າວອວດອຸຕຕຣິມນຸສສທັມ" ລຳດັບນັ້ນ ພຣະຜູ້ມີພຣະພາຄຕັສຣຽກພິກສຸທັງຫລາຍມາຮັບສັ່ງວ່າ "ພິກສຸທັງຫລາຍ ສາວົກທັງຫລາຍທີ່ມີຈັກສຸຢານກໍຍັງມີຢູ່ ເພາະສາວົກທີ່ຮູ້ທີ່ເຫັນນີ້ເປັນພຍານໄດ້ ເມື່ອກ່ອນເຮົາກໍເຫັນພິກສຸນີເຜດນັ້ນແຕ່ບໍ່ພຍາກອນ ເພາະກາຣພຍາກອນນັ້ນຈະບໍ່ເປັນປໂຍດເກື້ອກູລຂໍ້າຈະເປັນທຸກຂ໌ຍາວດົນແກ່ຜູ້ທີ່ບໍ່ເຊື່ອເຮົາ ພິກສຸທັງຫລາຍ ເຜດນັ້ນເຄີຍເປັນພິກສຸນີຊື່ອໃນສາສນາພຣະກັສສປສັມມາສັມພຸທທເຈົ້າ ເພາະຜົລກັມນັ້ນຈຶ່ງຕົກນຣົກໝົກໄໝ້ຢູ່ຫລາຍຮ້ອຍປີ ຫລາຍພັນປີ ຫລາຍແສນປີແລ້ວໄດ້ຮັບອັຕພາພເຊັ່ນນີ້ເພາະເສສກັມທີ່ຍັງເຫລືອ ໂມຄຄັລລານະກ່າວຈິງຈຶ່ງບໍ່ຕ້ອງອາບັຕິ" (ເຣື່ອງທີ ໕໖)

## ເຣື່ອງເຜດມີຮູບເປັນສິກຂມານາ ໑ ເຣື່ອງ

ສມັຍນັ້ນ ພຣະຜູ້ມີພຣະພາຄປະທັບ ນະ ພຣະເວຣຸວັນ ສຖານທີ່ໃຫ້ເຫຍື່ອກະແຕ ເຂຕກຸງຣາຊຄຶຫ໌ ຄັ້ງນັ້ນ ທ່ານພຣະລັກຂນະກັບພຣະມຫາໂມຄຄັລລານະພັກຢູ່ທີ່ເຂົາຄິຊຢກູຕ ຄັນເວລາເຊົ້າ ພຣະມຫາໂມຄຄັລລານະຄອງອັນຕຣວາສກຖືບາຕຣແລະຈີວອນເຂົ້າໄປຫາພຣະລັກຂນະຈົນເຖິງທີ່ຢູ່ ເຊີນຊວນວ່າ "ທ່ານລັກຂນະ ມາເຖີດ ພວກເຮົາຈະໄປບິນທບາຕໃນກຸງຣາຊຄຶຫ໌ດ້ວຍກັນ" ພຣະລັກຂນະຮັບຄຳແລ້ວ ຂນະທີ່ພຣະມຫາໂມຄຄັລລານະກຳລັງລົງຈາກພູເຂົາຄິຊຢກູຕ ເຖິງສຖານທີ່ແຫ່ງນຶ່ງໄດ້ສະແດງອາການແຍ້ມ ພຣະລັກຂນະຖາມວ່າ "ທ່ານໂມຄຄັລລານະ ແມ່ນຫຍັງເປັນເຫຕຸເປັນປັຈຈັຍໃຫ້ທ່ານສະແດງອາການແຍ້ມ" ພຣະມຫາໂມຄຄັລລານະຕອບວ່າ "ທ່ານລັກຂນະ ຍັງບໍ່ເຖິງເວລາຕອບບັນຫານີ້ ເມື່ອເຂົ້າເຝົ້າພຣະຜູ້ມີພຣະພາຄຄ່ອຍຖາມບັນຫານີ້ເຖີດ" ຄັນທ່ານທັງ ໒ ທຽວບິນທບາຕໃນກຸງຣາຊຄຶຫ໌ ກັບຈາກບິນທບາຕ ຫລັງຈາກສັນອາຫາຣ ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຖວາຍບັງຄົມແລ້ວນັ່ງລົງ ນະ ທີ່ສົມຄວຣ ຄັນແລ້ວພຣະລັກຂນະໄດ້ກ່າວຂຶ້ນວ່າ "ທ່ານມຫາໂມຄຄັລລານະ ເມື່ອທ່ານລົງຈາກພູເຂົາຄິຊຢກູຕ ໃນກຸງຣາຊຄຶຫ໌ນີ້ ເຖິງສຖານທີ່ແຫ່ງນຶ່ງໄດ້ສະແດງອາການແຍ້ມ ແມ່ນຫຍັງເປັນເຫຕຸເປັນປັຈຈັຍໃຫ້ທ່ານສະແດງອາການແຍ້ມ" ພຣະມຫາໂມຄຄັລລານະຕອບວ່າ "ທ່ານ ເມື່ອຜູ້ຂ້າລົງຈາກພູເຂົາຄິຊຢກູຕ ໄດ້ເຫັນສິກຂມານາເຜດລອຍໃນອາກາສ ສັງຂາຕີ ບາຕຣ ປະຄຕແອວ ແລະຮ່າງກາຍຂອງມັນຖືກໄຟຕິດລຸກໂຊນ ຈົນມັນຮ້ອງຄວນຄາງ ຜູ້ຂ້າມີຄວາມຮູ້ສຶກວ່າ ຫນ້າ ອັສຈັນແທ້ບໍ່ເຄີຍປາກົດທີ່ມີສັຕວ໌ເຊັ່ນນີ້ ມີຍັກສ໌ເຊັ່ນນີ້ ມີເຜດເຊັ່ນນີ້ ມີກາຣໄດ້ອັຕພາພເຊັ່ນນີ້ຢູ່" ພິກສຸທັງຫລາຍພາກັນຕຳຫນິ ປະນາມ ໂພນທນາວ່າ "ພຣະມຫາໂມຄຄັລລານະກ່າວອວດອຸຕຕຣິມນຸສສທັມ" ລຳດັບນັ້ນ ພຣະຜູ້ມີພຣະພາຄຕຣັສຮຽກພິກສຸທັງຫລາຍມາຮັບສັ່ງວ່າ "ພິກສຸທັງຫລາຍ ສາວົກທັງຫລາຍທີ່ມີຈັກສຸຢານກໍຍັງມີຢູ່ ເພາະສາວົກທີ່ຮູ້ທີ່ເຫັນນີ້ເປັນພຍານໄດ້ ເມື່ອກ່ອນເຮົາກໍເຫັນສິກຂມານາເຜດນັ້ນແຕ່ບໍ່ພຍາກອນ ເພາະກາຣພຍາກອນນັ້ນຈະບໍ່ເປັນປໂຍດເກື້ອກູລຊ້ຳຈະເປັນທຸກຂ໌ຍາວດົນແກ່ຜູ້ທີ່ບໍ່ເຊື່ອເຮົາ ພິກສຸທັງຫລາຍ ເຜດນັ້ນເຄີຍເປັນສິກຂມານາຊື່ວໃນສາສນາພຣະກັສສປສັມມາສັມພຸທທເຈົ້າ ເພາະຜົລກັມນັ້ນຈຶ່ງຕົກນຣົກຫມົກໄຫມ້ ຢູ່ຫລາຍຮ້ອຍປີ ຫລາຍພັນປີ ຫລາຍແສນປີແລ້ວໄດ້ຮັບອັຕພາພເຊັ່ນນີ້ເພາະເສສກັມທີ່ຍັງເຫລືອ ໂມຄຄັລລານະກ່າວຈິງຈຶ່ງບໍ່ຕ້ອງອາບັຕິ" (ເຣື່ອງທີ ໕໔)

## ເຣື່ອງເຜດມີຮູບເປັນສາມເນຣ ໑ ເຣື່ອງ

ສມັຍນັ້ນ ພຣະຜູ້ມີພຣະພາຄປະທັບ ນະ ພຣະເວຣຸວັນ ສຖານທີ່ໃຫ້ເຫຍື່ອກະແຕ ເຂຕກຸງຣາຊຄຶຫ໌ ຄັ້ງນັ້ນ ທ່ານພຣະລັກຂນະກັບພຣະມຫາໂມຄຄັລລານະພັກຢູ່ທີ່ເຂົາຄິຊຢກູຕ ຄັນເວລາເຊົ້າ ພຣະ

ມຫາໂມຄຄັລລານະຄອງອັນຕຣວາສກຖືບາຕຣແລະຈີວອນເຂົ້າໄປຫາພຣະລັກຂນະຈົນເຖິງທີ່ຢູ່ ເຊີນຊວນວ່າ "ທ່ານລັກຂນະ ມາເຖີດ ພວກເຮົາຈະໄປບິນທບາຕໃນກຸງຣາຊຄຶຫ໌ດ້ວຍກັນ" ພຣະລັກຂນະຮັບຄຳແລ້ວ ຂນະທີ່ພຣະມຫາໂມຄຄັລລານະກຳລັງລົງຈາກພູເຂົາຄິຊຢກູຕ ເຖິງສຖານທີ່ແຫ່ງນຶ່ງໄດ້ສະແດງອາການແຍ້ມ ພຣະລັກຂນະຖາມວ່າ "ທ່ານໂມຄຄັລລານະ ແມ່ນຫຍັງເປັນເຫຕຸເປັນປັຈຈັຍໃຫ້ທ່ານສະແດງອາການແຍ້ມ" ພຣະມຫາໂມຄຄັລລານະຕອບວ່າ "ທ່ານລັກຂນະ ຍັງບໍ່ເຖິງເວລາຕອບບັນຫານີ້ ເມື່ອເຂົ້າເຝົ້າພຣະຜູ້ມີພຣະພາຄຄ່ອຍຖາມບັນຫານີ້ເຖີດ" ຄັນທ່ານທັງ ໒ ທຽວບິນທບາຕໃນກຸງຣາຊຄຶຫ໌ ກັບຈາກບິນທບາຕ ຫລັງຈາກສັນອາຫາຣ ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຖວາຍບັງຄົມແລ້ວນັ່ງລົງ ນະ ທີ່ສົມຄວຣ ຄັນແລ້ວພຣະລັກຂນະໄດ້ກ່າວຂຶ້ນວ່າ "ທ່ານມຫາໂມຄຄັລລານະ ເມື່ອທ່ານລົງຈາກພູເຂົາຄິຊຢກູຕ ໃນກຸງຣາຊຄຶຫ໌ນີ້ ເຖິງສຖານທີ່ແຫ່ງນຶ່ງໄດ້ສະແດງອາການແຍ້ມ ແມ່ນຫຍັງເປັນເຫຕຸເປັນປັຈຈັຍໃຫ້ທ່ານສະແດງອາການແຍ້ມ" ພຣະມຫາໂມຄຄັລລານະຕອບວ່າ "ທ່ານ ເມື່ອຜູ້ຂ້າລົງຈາກພູເຂົາຄິຊຢກູຕໄດ້ເຫັນສາມເນຣເຜດ ລອຍໃນອາກາສ ສັງຂາຕິ ບາຕຣ ປຣະຄຕແອວ ແລະຮ່າງກາຍຂອງມັນຖືກໄຟຕິດລຸກໂຊນ ຈົນມັນຮ້ອງຄວນຄາງ ຜູ້ຂ້າມີຄວາມຮູ້ສຶກວ່າ ຫນ້າ ອັສຈັນແທ້ບໍ່ເຄີຍປາກົດທີ່ມີສັຕວ໌ເຊັ່ນນີ້ ມີຍັກສ໌ເຊັ່ນນີ້ ມີເຜດເຊັ່ນນີ້ ມີກາຣໄດ້ອັຕພາພເຊັ່ນນີ້ຢູ່" ພິກສຸທັງຫລາຍພາກັນຕຳຫນິ ປະນາມ ໂພນທະນາວ່າ "ພຣະມຫາໂມຄຄັລລານະກ່າວອວດອຸຕຕຣິມນຸສສທັມ" ລຳດັບນັ້ນ ພຣະຜູ້ມີພຣະພາຄຕຣັສຮຽກພິກສຸທັງຫລາຍມາຮັບສັ່ງວ່າ "ພິກສຸທັງຫລາຍ ສາວົກທັງຫລາຍທີ່ມີຈັກສຸຢານກໍຍັງມີຢູ່ ເພາະສາວົກທີ່ຮູ້ທີ່ເຫັນນີ້ເປັນພຍານໄດ້ ເມື່ອກ່ອນເຮົາກໍເຫັນສາມເນຣເຜດນັ້ນແຕ່ບໍ່ພຍາກອນ ເພາະການພຍາກອນນັ້ນຈະບໍ່ເປັນປໂຍດເກື້ອກູລຊ້ຳຈະເປັນທຸກຂ໌ຍາວດົນແກ່ຜູ້ທີ່ບໍ່ເຊື່ອເຮົາ ພິກສຸທັງຫລາຍ ເຜດນັ້ນເຄີຍເປັນສາມເນຣຊື່ວໃນສາສນາພຣະກັສສປສັມມາສັມພຸທທເຈົ້າ ເພາະຜົລກັມນັ້ນຈຶ່ງຕົກນຣົກຫມົກໄຫມ້ຢູ່ຫລາຍຮ້ອຍປີ ຫລາຍພັນປີ ຫລາຍແສນປີແລ້ວໄດ້ຮັບອັຕພາພເຊັ່ນນີ້ເພາະເສສກັມທີ່ຍັງເຫລືອ ໂມຄຄັລລານະກ່າວຈິງຈຶ່ງບໍ່ຕ້ອງອາບັຕິ" (ເຣື່ອງທີ ໕໕)

## ເຣື່ອງເຜດມີຮູບເປັນສາມເນຣ ໑ ເຣື່ອງ

ສມັຍນັ້ນ ພຣະຜູ້ມີພຣະພາຄປະທັບ ນະ ພຣະເວຣຸວັນ ສຖານທີ່ໃຫ້ເຫຍື່ອກະແຕ ເຂຕກຸງຣາຊຄຶຫ໌ ຄັ້ງນັ້ນ ທ່ານພຣະລັກຂນະກັບພຣະມຫາໂມຄຄັລລານະພັກຢູ່ທີ່ເຂົາຄິຊຢກູຕ ຄັນເວລາເຊົ້າ ພຣະມຫາໂມຄຄັລລານະຄອງອັນຕຣວາສກຖືບາຕຣແລະຈີວອນເຂົ້າໄປຫາພຣະລັກຂນະຈົນເຖິງທີ່ຢູ່ ເຊີນຊວນວ່າ "ທ່ານລັກຂນະ ມາເຖີດ ພວກເຮົາຈະໄປບິນທບາຕໃນກຸງຣາຊຄຶຫ໌ດ້ວຍກັນ" ພຣະລັກຂນະ

ຮັບຄໍາແລ້ວ ຂນະທີ່ພຣະມຫາໂມຄຄັລລານະກໍາລັງລົງຈາກພູເຂົາຄິຊຸຢູ ຣູຕ ເຖິງສຖານທີ່ແຫ່ງນຶ່ງໄດ້ ສະແດງອາການແຍ້ມ ພຣະລັກຂນະຖາມວ່າ "ທ່ານໂມຄຄັລລານະ ແມ່ນຫຍັງເປັນເຫຕຸເປັນປັຈຈັຍ ໃຫ້ທ່ານສະແດງອາການແຍ້ມ" ພຣະມຫາໂມຄຄັລລານະຕອບວ່າ "ທ່ານລັກຂນະ ຍັງບໍ່ເຖິງເວລາ ຕອບບັນຫານີ້ ເມື່ອເຂົ້າເຝົ້າພຣະຜູ້ມີພຣະພາຄຄ່ອຍຖາມບັນຫານີ້ເຖີດ" ຄັນທ່ານທັງ ໔ ທ່ຽວ ບິນທບາຕໃນກຸງຣາຊຄຶຫ໌ ກັບຈາກບິນທບາຕ ຫລັງຈາກສັນອາຫານ ເຂົ້າໄປເຝົ້າພຣະຜູ້ມີພຣະພາຄ ເຖິງທີ່ປະທັບ ຖວາຍບັງຄົມແລ້ວນັ່ງລົງ ນະ ທີ່ສົມຄວນ ຄັນແລ້ວພຣະລັກຂນະໄດ້ກ່າວຂຶ້ນວ່າ "ທ່ານມຫາໂມຄຄັລລານະ ເມື່ອທ່ານລົງຈາກພູເຂົາຄິຊຸຢູ ຣູຕ ໃນກຸງຣາຊຄຶຫ໌ນີ້ ເຖິງສຖານທີ່ແຫ່ງ ນຶ່ງໄດ້ສະແດງອາການແຍ້ມ ແມ່ນຫຍັງເປັນເຫຕຸເປັນປັຈຈັຍໃຫ້ທ່ານສະແດງອາການແຍ້ມ" ພຣະ ມຫາໂມຄຄັລລານະຕອບວ່າ "ທ່ານ ເມື່ອຜູ້ຂ້າລົງຈາກພູເຂົາຄິຊຸຢູ ຣູຕໄດ້ເຫັນສາມເນຣີເຜດ ລອຍ ໃນອາກາສ ສັງຂາຕິ ບາຕຣ ປຣະຄຕແອວ ແລະຮ່າງກາຍຂອງມັນຖືກໄຟຕິດລຸກໄຊນ ຈົນມັນຮ້ອງ ຄວນຄາງ ຜູ້ຂ້າມີຄວາມຮູ້ສຶກວ່າ ຫນ້າ ອັສຈັນແທ້ບໍ່ເຄີຍປາກົດທີ່ມີສັຕວ໌ເຊັ່ນນີ້ ມີຍັກສ໌ເຊັ່ນນີ້ ມີ ເຜດເຊັ່ນນີ້ ມີການໄດ້ອັຕພາພເຊັ່ນນີ້ຢູ່" ພິກສຸທັງຫລາຍພາກັນຕໍາຫນິ ປະນາມ ໂພນທນາວ່າ "ພຣະມຫາໂມຄຄັລລານະກ່າວອວດອຸຕຕຣິມນຸສສທັມ" ລໍາດັບນັ້ນ ພຣະຜູ້ມີພຣະພາຄຕຣັສຮຽກ ພິກສຸທັງຫລາຍມາຮັບສັ່ງວ່າ "ພິກສຸທັງຫລາຍ ສາວົກທັງຫລາຍທີ່ມີຈັກສຸຢານກໍຍັງມີຢູ່ ເພາະ ສາວົກທີ່ຮູ້ທີ່ເຫັນນີ້ເປັນພຍານໄດ້ ເມື່ອກ່ອນເຮົາກໍເຫັນສາມເນຣີເຜດນັ້ນແຕ່ບໍ່ພຍາກອນ ເພາະ ການພຍາກອນນັ້ນຈະບໍ່ເປັນປໂຍດເກື້ອກູລຊໍ້າຈະເປັນທຸກຂ໌ຍາວນານ ແກ່ຜູ້ທີ່ບໍ່ເຊື່ອເຮົາ ພິກສຸທັງ ຫລາຍ ເຜດນັ້ນເຄີຍເປັນສາມເນຣີຊື່ວໃນສາສນາພຣະກັສສປສັມມາສັມພຸທທເຈົ້າ ເພາະຜົລກັມນັ້ນ ຈຶ່ງຕົກນຣົກຫມົກໄຫມ້ຢູ່ຫລາຍຮ້ອຍປີ ຫລາຍພັນປີ ຫລາຍແສນປີແລ້ວໄດ້ຮັບອັຕພາພເຊັ່ນນີ້ ເພາະເສສກັມທີ່ຍັງເຫລືອ ໂມຄຄັລລານະກ່າວຈິງຈຶ່ງບໍ່ຕ້ອງອາບັຕິ" (ເຣື່ອງທີ ໕໖)

## ເຣື່ອງແມ່ນໍ້າຕໂປທາ ໑ ເຣື່ອງ

[໔໖໑] ສມັຍນັ້ນ ພຣະມຫາໂມຄຄັລລານະຮຽກພິກສຸທັງຫລາຍມາບອກວ່າ "ທ່ານທັງຫລາຍ ແມ່ນໍ້າຕໂປທານີ້ໄຫລມາຈາກສະນໍ້າທີ່ໃສເຢັນຈືດສນິທສະອາດມີທ່າຮຽບ ຫນ້າຣື່ນຣົມຍ໌ ມີຝູງປາ ແລະເຕົ່າອາສັຍຢູ່ມາກ ມີດອກ ບົວຂນາດເທົ່າກົງລໍ້ບານຢູ່ ແຕ່ປານນັ້ນ ແມ່ນໍ້າຕໂປທາກໍຍັງຄົງຮ້ອນ ເດືອດຜ່ານໄຫລໄປ" ພິກສຸທັງຫລາຍພາກັນຕໍາຫນິ ປະນາມ ໂພນທນາວ່າ "ຈັ່ງໃດພຣະມຫາໂມຄ ຄັລລານະເວົ້າຢ່າງນັ້ນລະ ທ່ານກ່າວອວດອຸຕຕຣິມນຸສ ສທັມ" ແລ້ວນໍາເຣື່ອງນີ້ໄປຂາບທູລພຣະຜູ້ມີ ພຣະພາຄໃຫ້ຊົງຊາບ ພຣະຜູ້ມີພຣະພາຄຕຣັສວ່າ "ພິກສຸທັງຫລາຍ ແມ່ນໍ້າຕໂປທາໄຫລຜ່ານມາ

ຣະຫວ່າງມຫານຣົກ ໔ ຂຸມ ດັ່ງນັ້ນຈຶ່ງຄິງເດືອດພ່ານໄຫລໄປ ໂມຄຄັລລານະກ່າວ ແມ່ນແທ້ບໍ່ຕ້ອງອາບັຕິ" (ເຣື່ອງທີ ໕໗)

## ເຣື້ອງການສູ້ຣົບໃນກຸງຣາຊຄຶຫ໌ ໑ ເຣື້ອງ

ສມັຍນັ້ນ ພຣະເຈົ້າພິມພິສາຣຈອມທັພມຄທຣັຖ ທຳສົງຄາມກັບພວກເຈົ້າລິຈສວີແລ້ວພ່າຍແພ້ ພາຍຫລັງທ້າວທ່ານຊົງຣະດົມພົລຍົກໄປຣົບຈົນໄດ້ຊັຍຊນະ ໃຫ້ຕີກອງປະກາດຊັຍຊນະໃນການສົງຄາມວ່າ "ພຣະຣາຊາຊົງຊນະພວກເຈົ້າລິຈສວີ" ລຳດັບນັ້ນພຣະມຫາໂມຄຄັລລານະຮຽກພິກສຸທັງຫລາຍມາບອກວ່າ "ທ່ານທັງຫລາຍ ພຣະເຈົ້າແຜ່ນດິນຊົງພ່າຍແພ້ພວກເຈົ້າລິຈສວີ ແຕ່ເຂົາຕີກອງປະກາດຊັຍຊນະໃນການສົງຄາມວ່າ 'ພຣະຣາຊາຊົງຊນະພວກເຈົ້າລິຈສວີ" ພິກສຸພາກັນຕຳຫນິ ປະນາມ ໂພນທນາວ່າ "ຈັ່ງໃດພຣະມຫາໂມຄຄັລລານະກ່າວຢ່າງນັ້ນລະ ທ່ານກ່າວອວດອຸຕຕຣິມນຸສສທັມ" ແລ້ວນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະຜູ້ມີພຣະພາຄຕຣັສວ່າ "ພິກສຸທັງຫລາຍ ຄັ້ງທຳອິດພຣະເຈົ້າແຜ່ນດິນຊົງພ່າຍແພ້ພວກເຈົ້າລິຈສວີ ພາຍຫລັງທ້າວທ່ານຊົງຣະດົມພົລຍົກໄປຣົບຈົນໄດ້ຊັຍຊນະ ໂມຄຄັລລານະກ່າວແມ່ນແທ້ບໍ່ຕ້ອງອາບັຕິ" (ເຣື່ອງທີ ໕໘)

## ເຣື່ອງໄດ້ຍິນສຽງຊ້າງລົງນ້ຳ ໑ ເຣື້ອງ

[໒໖໔] ສມັຍນັ້ນ ພຣະມຫາໂມຄຄັລລານະຮຽກພິກສຸທັງຫລາຍມາບອກວ່າ "ທ່ານທັງຫລາຍ ຜູ້ຂ້າເຂົ້າອາເນຍຊສມາທິທີ່ຝັ່ງແມ່ນ້ຳສັປປິນິກາໃນຕາແສງນີ້ ໄດ້ຍິນສຽງຝູງຊ້າງລົງນ້ຳແລ້ວຂຶ້ນຈາກນ້ຳສົ່ງສຽງດັ່ງເຫມືອນນົກກະຣຽນ" ພິກສຸທັງຫລາຍພາກັນຕຳຫນິ ປະນາມ ໂພນທນາວ່າ "ຈັ່ງໃດພຣະມຫາໂມຄຄັລລານະ
ກ່າວຢ່າງນັ້ນລະ ທ່ານກ່າວອວດອຸຕຕຣິມນຸສສທັມ" ແລ້ວນຳເຣື້ອງນີ້ຂາບທູລພຣະຜູ້ມີພຣະພາຄ
ໃຫ້ຊົງຊາບ
ພຣະຜູ້ມີພຣະພາຄຕຣັສວ່າ "ພິກສຸທັງຫລາຍ ສມາທິນັ້ນມີຢູ່ແມ່ນແທ້ແຕ່ຍັງບໍ່ບໍຣິສຸດທ໌ ໂມຄຄັລລານະກ່າວ ແມ່ນແທ້ຈຶ່ງບໍ່ຕ້ອງອາບັຕິ" (ເຣື່ອງທີ ໕໙)

ພຣະວິນັຍປິດົກ ມຫາວິພັງຄ໌ [໑. ປາຣາຊິກກັນທ໌] ປາຣາຊິກສິກຂາບົທທີ ໔ ບົທສຣຸປ
ເຣື້ອງພຣະອຣຫັນຕ໌ໄສພິຕະຣະນຶກຊາຕິໄດ້ ໕໐໐ ກັປ ໑ ເຣື້ອງ

ຄັ້ງນັ້ນ ພຣະໂສພິຕະບອກຮຽກພິກສຸທັງຫລາຍມາວ່າ "ຜູ້ຂ້າຣະນຶກຊາຕິໄດ້ ໕໐໐ ກັປ" ພິກສຸທັງຫລາຍພາກັນຕໍາຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະໂສພິຕະກ່າວຢ່າງນັ້ນລະ ທ່ານກ່າວອວດອຸຕຕຣິມນຸສສທັມ" ແລ້ວນໍາເອົາເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະຜູ້ມີພຣະພາຄຕຣັສວ່າ "ພິກສຸທັງຫລາຍ ຊາຕິໃນອດີຕຂອງໂສພິຕພິກສຸນັ້ນມີຢູ່ ແຕ່ມີພຽງຊາຕິດຽວເທົ່ານັ້ນ ໂສພິຕະກ່າວແມ່ນແທ້ຈຶ່ງບໍ່ຕ້ອງອາບັຕິ" (ເຣື່ອງທີ ໓໐)

ປາຣາຊິກສິກຂາບົທທີ ໔ ຈົບ

## ບົທສຣຸປ

[໔໓໓] ທ່ານທັງຫລາຍ ທັມ ຄືປາຣາຊິກ ໔ ສິກຂາບົທຂ້າພະເຈົ້າຍົກຂຶ້ນສະແດງແລ້ວ ແຕ່ລະຂໍ້ໆ ຊຶ່ງພິກສຸຕ້ອງເຂົ້າແລ້ວ ຍ່ອມຢູ່ຮ່ວມກັບພິກສຸທັງຫລາຍບໍ່ໄດ້ ເປັນປາຣາຊິກ ຫາສັງວາສບໍ່ໄດ້ເຫມືອນກ່ອນບວຊ

ຂ້າພະເຈົ້າຂໍຖາມທ່ານທັງຫລາຍໃນທັມ ຄື ປາຣາຊິກ ໔ ສິກຂາບົທນັ້ນວ່າ "ທ່ານທັງຫລາຍບໍຣິສຸດທ໌ແລ້ວຫລື"

ຂ້າພະເຈົ້າຂໍຖາມເປັນຄັ້ງທີ ໒ ວ່າ "ທ່ານທັງຫລາຍບໍຣິສຸດທ໌ແລ້ວຫລື" ຂ້າພະເຈົ້າຂໍຖາມເປັນຄັ້ງທີ ໓ ວ່າ "ທ່ານທັງຫລາຍບໍຣິສຸດທ໌ແລ້ວຫລື"

## ຮວມສິກຂາບົທທີ່ມີໃນປາຣາຊິກກັນທ໌

ທ່ານທັງຫລາຍບໍຣິສຸດທ໌ແລ້ວໃນທັມ ຄືປາຣາຊິກ ໔ ສິກຂາບົທນີ້ ເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືຄວາມນິ່ງນັ້ນເປັນມຕິຢ່າງນີ້

ປາຣາຊິກ ຈົບ

## ຮວມສິກຂາບົທທີ່ມີໃນປາຣາຊິກກັນທ໌

ປາຣາຊິກກັນຫ໌ມີ ໔ ສິກຂາບົທ ຄື
໑. ປາຣາຊິກສິກຂາບົທທີ ໑ ວ່າດ້ວຍການເສພເມຖຸນທັມ
໒. ປາຣາຊິກສິກຂາບົທທີ ໒ ວ່າດ້ວຍການຖືເອົາສິ່ງຂອງທີ່ເຈົ້າຂອງບໍ່ໄດ້ໃຫ້
໓. ປາຣາຊິກສິກຂາບົທທີ ໓ ວ່າດ້ວຍການພາກກາຍມນຸສ໌ຍ
໔. ປາຣາຊິກສິກຂາບົທທີ ໔ ວ່າດ້ວຍການກ່າວອວດອຸຕຕຣິມນຸສສທັມ
ສິກຂາບົທເຫລົ່ານີ້ເປັນທີ່ຕັ້ງແຫ່ງການຕັດຮາກເຫງົ້າ ຢ່າງບໍ່ຕ້ອງສົງສັຍ

ປາຣາຊິກກັນຫ໌ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໒. ສັງຄາທິເສສກັນຫ໌] ໑. ສຸກກວິສັຕຖິສິກຂາບົທ ນິທານວັຕຖຸ

## ໒. ສັງຄາທິເສສກັນຫ໌

ທ່ານທັງຫລາຍ ທັມຄືສັງຄາທິເສສ ໑໓ ສິກຂາບົທເຫລົ່ານີ້ ມາເຖິງວາຣະທີ່ຈະຍົກຂຶ້ນສະແດງເປັນຂໍ້ໆ ຕາມລຳດັບ

### ໑. ສຸກກວິສັຕຖິສິກຂາບົທ
### ວ່າດ້ວຍການຈົງໃຈທຳນ້ຳອສຸຈິໃຫ້ເຄື່ອນ
### ເຣື່ອງພຣະເສຍຍສກະ

[໒໓໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ທ່ານພຣະເສຍຍສກະບໍ່ຍິນດີທີ່ຈະປະພຶດພຣົມຈັນຍ໌ ເພາະຄວາມບໍ່ຍິນດີນັ້ນ ທ່ານຈຶ່ງຈ່ອຍຜອມ ຫມອງເສົ້າ ຫລ່າເຫລືອງເສັ້ນເອັນຂຶ້ນເຕັມໄປຫມົດ ທ່ານພຣະອຸທາຍີເຫັນທ່ານພຣະເສຍຍສກະຈ່ອຍຜອມ ຫມອງເສົ້າ ຫລ່າເຫລືອງ ເສັ້ນເອັນຂຶ້ນເຕັມໄປຫມົດ ຈຶ່ງໄດ້ກ່າວກັບທ່ານວ່າ "ຄຸນເສຍຍສກະ ເປັນຫຍັງ ຄຸນຈຶ່ງຈ່ອຍຜອມ ຫມອງເສົ້າຫລ່າເຫລືອງ ເສັ້ນເອັນຂຶ້ນເຕັມໄປຫມົດລະ ຄົງບໍ່ຍິນດີທີ່ຈະປະພຶດ ພຣົມຈັນຍ໌ແລ້ວຕີບໍ່" ທ່ານພຣະເສຍຍສກະຮັບວ່າເປັນຢ່າງນັ້ນ ທ່ານພຣະອຸທາຍີແນະນຳວ່າ "ຖ້າເປັນຢ່າງນັ້ນ ທ່ານຈົ່ງສັນອາຫານຕາມຕ້ອງການ ຈຳວັດ ສົງນ້ຳຕາມຕ້ອງການເຖີດ ເສັດແລ້ວ ເມື່ອທ່ານເກີດຄວາມກະສັນ ຖືກຣາຄະຣົບກວນຈິຕຂຶ້ນມາ ກໍຈົ່ງໃຊ້ມືພຍາຍາມທຳນ້ຳອສຸຈິໃຫ້ເຄື່ອນ" "ທຳເຊັ່ນນີ້ຈະຄວຣຫລື ຂນ້ອຍ"

"ທ່ານທຳເຊັ່ນນີ້ຄວຣ ຂະນ້ອຍເອງກໍທຳເຊັ່ນນີ້" ຄັນເມື່ອທ່ານພຣະເສຍຍສກະສັນອາຫາຣ ຈຳວັດສິ່ງນ້ຳຕາມຕ້ອງການແລ້ວ ເມື່ອເກີດຄວາມກະສັນຖືກຣາຄະຣົບກວນຈິຕຂຶ້ນມາກໍໃຊ້ມືພຍາຍາມທຳນ້ຳອສຸຈິໃຫ້ເຄື່ອນ ເວລາຕໍ່ມາ ທ່ານມີຜິວພັນຜ່ອງໃສ ແລດູອິ່ມເອີບ ເພື່ອນພິກສຸຖາມທ່ານວ່າ "ທ່ານເສຍຍສກະ ເມື່ອກ່ອນ ທ່ານຈ່ອຍຜອມ ຫມອງເສົ້າ ຫລ່າເຫລືອງ ເສັ້ນເອັນຂຶ້ນເຕັມໄປຫມົດ ແຕ່ເວລານີ້ ກັບມີຜິວພັນຜ່ອງໃສ ແລດູອິ່ມເອີບ ທ່ານໃຊ້ຍາແມ່ນຫຍັງຫລື" ພຣະເສຍຍສກະຕອບວ່າ "ບໍ່ໄດ້ໃຊ້ຍາຫຍັງ ແຕ່ຂະນ້ອຍສັນອາຫາຣຕາມຕ້ອງການ ຈຳວັດ ສິ່ງນ້ຳຕາມຕ້ອງການ ເມື່ອເກີດຄວາມກະສັນຖືກຣາຄະຣົບກວນຈິຕຂຶ້ນມາ ກໍໃຊ້ມືພຍາຍາມທຳນ້ຳອສຸຈິໃຫ້ເຄື່ອນ" "ທ່ານໃຊ້ມືທີ່ປ້ອນເຂົ້າທີ່ເຂົາຖວາຍດ້ວຍສັດທາ ພຍາຍາມທຳນ້ຳອສຸຈິໃຫ້ເຄື່ອນອອກມາປານນັ້ນຫລື" ພຣະເສຍຍສກະຮັບວ່າ "ແມ່ນແລ້ວ ຂນ້ອຍ" ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມໂພນທະນາວ່າ "ຈັ່ງໃດທ່ານພຣະເສຍຍສກະຈຶ່ງໃຊ້ມືພຍາຍາມທຳນ້ຳອສຸຈິໃຫ້ເຄື່ອນລະ" ຄັນພິກສຸທັງຫລາຍຕຳຫນິພຣະເສຍຍສກະໂດຍປະການຕ່າງໆ ແລ້ວຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

## ຊົງປະຊຸມສົງຄ໌ບັນຍັຕສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື່ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພຣະເສຍຍສກະວ່າ "ທ່ານໃຊ້ມືພຍາຍາມທຳນ້ຳອສຸຈິໃຫ້ເຄື່ອນ ແມ່ນແທ້ບໍ" ພຣະເສຍຍສກະທູລຮັບວ່າ "ຈິງພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ໂມຄບຸຣຸສ ການກະທຳຂອງທ່ານບໍ່ສົມຄວຣ ບໍ່ຄ້ອຍຕາມ ບໍ່ເຫມາະ ສົມ ບໍ່ແມ່ນກິຈຂອງສມນະ ໃຊ້ບໍ່ໄດ້ ບໍ່ຄວຣທຳເລີຍ ຈັ່ງໃດທ່ານຈຶ່ງໃຊ້ມືພຍາຍາມທຳນ້ຳອສຸຈິໃຫ້ເຄື່ອນລະ ເຮົາສະແດງທັມໂດຍປະການຕ່າງໆ ເພື່ອຄາຍຄວາມກຳຫນັດ ບໍ່ແມ່ນເພື່ອຄວາມກຳຫນັດ ເພື່ອຄວາມພາກ ບໍ່ແມ່ນເພື່ອຄວາມປະກອບໄວ້ ເພື່ອຄວາມບໍ່ຖືຫມັ້ນ ບໍ່ແມ່ນເພື່ອຄວາມຖືຫມັ້ນ ບໍ່ແມ່ນຫລື ເມື່ອເຮົາສະແດງທັມເພື່ອຄາຍຄວາມກຳຫນັດ ທ່ານກໍຍັງຈະຄິດເພື່ອຄວາມກຳຫນັດ ເຮົາສະແດງທັມເພື່ອຄວາມພາກ ທ່ານກໍຍັງຄິດເພື່ອຄວາມປະກອບໄວ້ ເຮົາສະແດງທັມເພື່ອຄວາມບໍ່ຖືຫມັ້ນ ທ່ານກໍຍັງຈະຄິດເພື່ອຄວາມຖືຫມັ້ນ ໂມຄບຸຣຸສ ເຮົາສະແດງທັມໂດຍປະການຕ່າງໆ ເພື່ອຄາຍຖິ້ມຣາຄະ ເພື່ອສວ່າງຄວາມເມົາ ເພື່ອດັບຄວາມຫິວ ເພື່ອຖອນຄວາມອາລັຍ ເພື່ອຕັດວັຕຕະ ເພື່ອຄວາມສິ້ນຕັນຫາ ເພື່ອຄາຍຄວາມກຳຫນັດ ເພື່ອດັບທຸກຂ໌ ເພື່ອນິພພານ ບໍ່ແມ່ນບໍ ໂມຄບຸຣຸສ ເຮົາບອກການລະກາມ ການກຳຫນົດຮູ້ຄວາມສຳຄັນໃນກາມ ການກຳຈັດຄວາມຫິວໃນກາມ ການເພີກຖອນຄວາມສິ້ນໄປໃນກາມ ການຣະງັບຄວາມ

ກົດກຸ້ມເພາະການໄວ້ໂດຍປະການຕ່າງໆ ບໍ່ແມ່ນບໍ ການກະທຳຢ່າງນີ້ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ທີ່ຈິງກັບຈະເຮັດໃຫ້ຄົນທີ່ບໍ່ເຫລື້ອມໃສກໍບໍ່ເຫລື້ອມໃສໄປເລີຍ ຄົນທີ່ເຫລື້ອມໃສຢູ່ແລ້ວບາງພວກກໍຈະກາຍເປັນອື່ນໄປ” ຄັນພຣະຜູ້ມີພຣະພາຄຊົງຕຳຫນິພຣະເສຍຍສກະໂດຍປະການຕ່າງໆ ແລ້ວ ໄດ້ຕຣັສໂທສແຫ່ງຄວາມເປັນຄົນລ້ຽງ ຍາກ ບຳຣຸງຍາກ ຯລຯ ຕຣັສຄຸນແຫ່ງຄວາມເປັນຄົນລ້ຽງງ່າຍ ບຳຣຸງງ່າຍ ຯລຯ ຊົງສະແດງທັມມີກຖາໃຫ້ເຫມາະສົມໃຫ້ຄ້ອຍຕາມກັບເຣື້ອງນັ້ນ ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງ ດັ່ງນີ້

ພຣະບັນຍັຕ

ພິກສຸຈົງໃຈທຳນ້ຳອສຸຈິໃຫ້ເຄື່ອນ ເປັນສັງຂາທິເສສ

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັຕໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື້ອງພຣະເສຍຍສກະ ຈົບ

ເຣື້ອງພິກສຸຫລາຍຮູບ

[໒໓໕] ສມັຍນັ້ນ ພິກສຸທັງຫລາຍສັນອາຫານອັນປານີຕ ຈຳວັດຫລັບ ຂາດສຕິສັມປຊັຍຢະ ນ້ຳອສຸຈິອອກມາເພາະຄວາມຝັນ ພວກທ່ານເກີດຄວາມກັງວົລໃຈວ່າ “ພຣະຜູ້ມີພຣະພາຄຊົງບັນຍັຕສິກຂາບົທໄວ້ວ່າ ‘ພິກສຸຈົງໃຈທຳນ້ຳອສຸຈິໃຫ້ເຄື່ອນ ເປັນສັງຂາທິເສສ’ ແຕ່ພວກເຮົາມີນ້ຳອສຸຈິອອກມາເພາະຄວາມຝັນ ໃນຄວາມຝັນນັ້ນມີເຈຕນາ ພວກເຮົາຕ້ອງອາບັຕິສັງຂາທິເສສຫລືບໍ່” ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ພຣະອົງຄ໌ຕຣັສວ່າ “ພິກສຸທັງຫລາຍ ເຈຕນານັ້ນມີຢູ່ ແຕ່ບໍ່ຄວຣກ່າວວ່າມີ” (ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ແລ້ວຕຣັສຮຽກພິກສຸທັງຫລາຍມາ) ຯລຯ ຮັບສັ່ງໃຫ້ພິກສຸທັງ ຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ສັງຂາທິເສສກັນຫ໌] ໑. ສຸກກວິສັຕຖິສິກຂາບົທ ບົທພາຊນີຍ໌

ພຣະອນຸບັນຍັຕ

[໒໓໖] ພິກສຸຈົງໃຈທຳນ້ຳອສຸຈິໃຫ້ເຄື່ອນ ເປັນສັງຂາທິເສສ ຍົກເວັ້ນໄວ້ແຕ່ຝັນ

## ເອື້ອງພິກສຸຫລາຍຮູບ ຈົບ

### ສິກຂາບົທວິພັງຄ໌

[໒໓໗] ຄໍາວ່າ ຈົງໃຈ ຄວາມວ່າ ຮູ້ຢູ່ ຮູ້ດີຢູ່ ຈົງໃຈ ຝ່າຝືນລ່ວງລະເມີດ
ຄໍາວ່າ ນໍ້າອສຸຈິ ອທິບາຍວ່າ ນໍ້າອສຸຈິມີ ໑໐ ຊນິດ ຄື (໑) ອສຸຈິສີຂຽວ (໒) ອສຸຈິສີເຫລືອງ (໓) ອສຸຈິສີແດງ (໔) ອສຸຈິສີຂາວ (໕) ອສຸຈິສີເຫມືອນປຽງ (໖) ອສຸຈິສີເຫມືອນນໍ້າທ່າ (໗) ອສຸຈິສີເຫມືອນນໍ້າມັນ (໘) ອສຸຈິສີເຫມືອນນົມສດ (໙) ອສຸຈິສີເຫມືອນນົມສົ້ມ (໑໐) ອສຸຈິສີເຫມືອນເນີຍໃສ
ຄໍາວ່າ ເຮັດໃຫ້ເຄື່ອນ ຄື ກິຣິຍາທີ່ເຮັດໃຫ້ເຄື່ອນຈາກຖານ ຕຣັສຮຽກວ່າ ເຮັດໃຫ້ເຄື່ອນ
ຄໍາວ່າ ຍົກເວັ້ນໄວ້ແຕ່ຝັນ ຄື ຍົກເວັ້ນຄວາມຝັນ
ຄໍາວ່າ ເປັນສັງຄາທິເສສ ຄວາມວ່າ ສໍາລັບອາບັຕິນັ້ນ ສົງຄ໌ເທົ່ານັ້ນໃຫ້ປຣິວາສ ຊັກເຂົ້າຫາອາບັຕິເດີມ ໃຫ້ມານັຕແລະຮຽກເຂົ້າຫມູ່ ຄນະກໍທໍາບໍ່ໄດ້ ພິກສຸຮູບດຽວກໍທໍາບໍ່ໄດ້ ສະນັ້ນຈຶ່ງຕຣັສວ່າ "ເປັນສັງຄາທິເສສ"
ຄໍາວ່າ "ເປັນສັງຄາທິເສສ" ນີ້ ເປັນການຂນານນາມ ເປັນຄໍາຮຽກຫມວດອາບັຕິນັ້ນ ນັ້ນເອງໂດຍອ້ອມ ເພາະເຫຕຸນັ້ນ ຈຶ່ງຕຣັສຮຽກວ່າ "ເປັນສັງຄາທິເສສ"

### ບົທພາຊນີຍ໌

### ອຸບາຍ ໔ ປະການ

(໑) ພິກສຸທໍານໍ້າອສຸຈິໃຫ້ເຄື່ອນໃນຮູບພາຍໃນ (໒) ພິກສຸທໍານໍ້າອສຸຈິໃຫ້ເຄື່ອນໃນຮູບພາຍນອກ (໓) ພິກສຸທໍານໍ້າອສຸຈິໃຫ້ເຄື່ອນໃນຮູບພາຍໃນແລະພາຍນອກ (໔) ພິກສຸທໍານໍ້າອສຸຈິໃຫ້ເຄື່ອນເມື່ອສ່າຍແອວໃນອາກາສ

### ກາລ ໕

(໑) ພິກຂຸທຳນ້ຳອະສຸຈິໃຫ້ເຄື່ອນເມື່ອເກີດຄວາມກຳຫນັດ (໒) ພິກຂຸທຳນ້ຳອະສຸຈິໃຫ້ເຄື່ອນເມື່ອປວດອຸຈຈາຣະ (໓) ພິກຂຸທຳນ້ຳອະສຸຈິໃຫ້ເຄື່ອນເມື່ອປວດປັສສາວະ (໔) ພິກຂຸທຳນ້ຳອະສຸຈິໃຫ້ເຄື່ອນເມື່ອຕ້ອງລົມ (໕) ພິກຂຸທຳນ້ຳອະສຸຈິໃຫ້ເຄື່ອນເມື່ອຖືກບົ້ງຂົບ

ເຈຕນາ ໑໐ ປະກາຣ

(໑) ພິກຂຸທຳນ້ຳອະສຸຈິໃຫ້ເຄື່ອນເພື່ອຄວາມຫາຍໂຣຄ (໒) ພິກຂຸທຳນ້ຳອະສຸຈິໃຫ້ເຄື່ອນເພື່ອຄວາມສຸຂ (໓) ພິກຂຸທຳນ້ຳອະສຸຈິໃຫ້ເຄື່ອນເພື່ອເປັນຢາ (໔) ພິກຂຸທຳນ້ຳອະສຸຈິໃຫ້ເຄື່ອນເພື່ອເປັນທານ (໕) ພິກຂຸທຳນ້ຳອະສຸຈິໃຫ້ເຄື່ອນເພື່ອເປັນບຸນ (໖) ພິກຂຸທຳນ້ຳອະສຸຈິໃຫ້ເຄື່ອນເພື່ອບູຊາຍັນ (໗) ພິກຂຸທຳນ້ຳອະສຸຈິໃຫ້ເຄື່ອນເພື່ອຈະໄປສວັນຄ໌ (໘) ພິກຂຸທຳນ້ຳອະສຸຈິໃຫ້ເຄື່ອນເພື່ອສືບພັນທຸ໌ (໙) ພິກຂຸທຳນ້ຳອະສຸຈິໃຫ້ເຄື່ອນເພື່ອທົດລອງ (໑໐) ພິກຂຸທຳນ້ຳອະສຸຈິໃຫ້ເຄື່ອນເພື່ອຄວາມສນຸກ

ວັຕຖຸທີ່ປະສົງຄ໌ ໑໐ ປະກາຣ

(໑) ພິກຂຸທຳນ້ຳອະສຸຈິສີຂຽວໃຫ້ເຄື່ອນ (໒) ພິກຂຸທຳນ້ຳອະສຸຈິສີເຫລືອງໃຫ້ເຄື່ອນ (໓) ພິກຂຸທຳນ້ຳອະສຸຈິສີແດງໃຫ້ເຄື່ອນ (໔) ພິກຂຸທຳນ້ຳອະສຸຈິສີຂາວໃຫ້ເຄື່ອນ (໕) ພິກຂຸທຳນ້ຳອະສຸຈິສີເຫມືອນປຽງໃຫ້ເຄື່ອນ (໖) ພິກຂຸທຳນ້ຳອະສຸຈິສີເຫມືອນນ້ຳທ່າໃຫ້ເຄື່ອນ (໗) ພິກຂຸທຳນ້ຳອະສຸຈິສີເຫມືອນນ້ຳມັນໃຫ້ເຄື່ອນ (໘) ພິກຂຸທຳນ້ຳອະສຸຈິສີເຫມືອນນົມສົດໃຫ້ເຄື່ອນ (໙) ພິກຂຸທຳນ້ຳອະສຸຈິສີເຫມືອນນົມສົ້ມໃຫ້ເຄື່ອນ (໑໐) ພິກຂຸທຳນ້ຳອະສຸຈິສີເຫມືອນເນີຍໃສໃຫ້ເຄື່ອນ

[໔໓໘] ຄຳວ່າ ໃນຮູບພາຍໃນ ໄດ້ແກ່ ຮູບທີ່ມີວິນຍານຄອງໃນຕົວ

ຄຳວ່າ ໃນຮູບພາຍນອກ ໄດ້ແກ່ ຮູບທີ່ມີວິນຍານຄອງຫລືທີ່ບໍ່ມີວິນຍານຄອງນອກຕົວ

ຄຳວ່າ ໃນຮູບພາຍໃນແລະພາຍນອກ ໄດ້ແກ່ ຮູບທັງ ໒ ນັ້ນ

ຄຳວ່າ ເມື່ອສ່າຍແອວໃນອາກາສ ຫມາຍຄວາມວ່າ ເມື່ອພິກຂຸພຍາຍາມໃນອາກາສອົງຄຊາຕໃຊ້ກາຣໄດ້

ຄຳວ່າ ເມື່ອເກີດຄວາມກຳຫນັດ ຄື ເມື່ອຖືກຄວາມກຳຫນັດຣົບກວນ ອົງຄຊາຕໃຊ້ກາຣໄດ້

ຄຳວ່າ ເມື່ອປວດອຸຈຈາຣະ ຄື ເມື່ອປວດອຸຈຈາຣະ ອົງຄຊາຕໃຊ້ກາຣໄດ້

ຄຳວ່າ ເມື່ອປວດປັສສາວະ ຄື ເມື່ອປວດປັສສາວະ ອົງຄຊາຕໃຊ້ກາຣໄດ້

ຄຳວ່າ ເມື່ອຕ້ອງລົມ ຄື ເມື່ອຖືກລົມເພີຍພັດ ອິງຄຊາຕໃຊ້ກາຣໄດ້
ຄຳວ່າ ເມື່ອຖືກປິ້ງຂົນ ຄື ເມື່ອຖືກປິ້ງຂົນບຽດບຽນແລ້ວ ອິງຄຊາຕໃຊ້ກາຣໄດ້

[໒໓໙] ຄຳວ່າ ເພື່ອຄວາມຫາຍໂຣຄ ຄື ມຸ່ງວ່າຈະເປັນຜູ້ບໍ່ມີໂຣຄ
ຄຳວ່າ ເພື່ອຄວາມສຸຂ ຄື ມຸ່ງວ່າຈະໃຫ້ເກີດສຸຂເວທນາ
ຄຳວ່າ ເພື່ອເປັນຢາ ຄື ມຸ່ງວ່າຈະເປັນຍາ
ຄຳວ່າ ເພື່ອເປັນທານ ຄື ມຸ່ງວ່າຈະໃຫ້ທານ
ຄຳວ່າ ເພື່ອເປັນບຸນ ຄື ມຸ່ງວ່າຈະເປັນບຸນ
ຄຳວ່າ ເພື່ອບູຊາຍັນ ຄື ມຸ່ງວ່າຈະບູຊາຍັນ
ຄຳວ່າ ເພື່ອຈະໄປສວັນຄ໌ ຄື ມຸ່ງວ່າຈະໄດ້ໄປສວັນຄ໌
ຄຳວ່າ ເພື່ອສືບພັນຫຸ໌ ຄື ມຸ່ງວ່າຈັກສືບພັນຫຸ໌
ຄຳວ່າ ເພື່ອທົດລອງ ຄື ທົດລອງວ່າ ນ້ຳອສຸຈິຈັກເປັນສີຂຽວ ນ້ຳອສຸຈິຈັກເປັນສີເຫລືອງ ນ້ຳອສຸຈິຈັກເປັນສີແດງ ນ້ຳອສຸຈິຈັກເປັນສີຂາວ ນ້ຳອສຸຈິຈັກເປັນສີເຫມືອນປຽງ ນ້ຳອສຸຈິຈັກເປັນສີເຫມືອນນ້ຳທ່າ ນ້ຳອສຸຈິຈັກເປັນສີເຫມືອນນ້ຳມັນ ນ້ຳອສຸຈິຈັກເປັນສີເຫມືອນນົມສດ ນ້ຳອສຸຈິຈັກເປັນສີເຫມືອນນົມສົ້ມ ຫລືນ້ຳອສຸຈິຈັກເປັນສີເຫມືອນເນີຍໃສ
ຄຳວ່າ ເພື່ອຄວາມສນຸກ ຄື ມີຄວາມປະສົງຄ໌ຈະຫລິ້ນ

### ພຣະວິນັຍປິດົກ ມຫາວິພັງຄ໌ [໒. ສັງຂາທິເສສກັນຫ໌] ໑. ສຸກກວິສັຕຖິສິກຂາບົທ ບົທພາຊນີຍ໌ ສຸທທິກສັງຂາທິເສສ

### ອຸບາຍເຮັດໃຫ້ນ້ຳອສຸຈິເຄື່ອນ ໔ ຢ່າງ

[໒໔໐] (໑) ພິກສຸຈົງໃຈພຍາຍາມໃນຮູບພາຍໃນ ນ້ຳອສຸຈິເຄື່ອນ ຕ້ອງອາບັຕິສັງຂາທິເສສ
(໒) ພິກສຸຈົງໃຈພຍາຍາມໃນຮູບພາຍນອກ ນ້ຳອສຸຈິເຄື່ອນ ຕ້ອງອາບັຕິສັງຂາທິເສສ
(໓) ພິກສຸຈົງໃຈພຍາຍາມໃນຮູບພາຍໃນແລະພາຍນອກ ນ້ຳອສຸຈິເຄື່ອນ ຕ້ອງອາບັຕິສັງຂາທິເສສ
(໔) ພິກສຸຈົງໃຈພຍາຍາມສ່າຍແອວໃນອາກາສ ນ້ຳອສຸຈິເຄື່ອນ ຕ້ອງອາບັຕິສັງຂາທິເສສ

### ນ້ຳອສຸຈິເຄື່ອນ ໕ ກາລ

(໑) ພິກຂຸຈົງໃຈພຍາຍາມເມື່ອເກີດຄວາມກຳຫນັດ ນ້ຳອສຸຈິເຄື່ອນ ຕ້ອງອາບັຕິສັງຂາທິເສສ
(໒) ພິກຂຸຈົງໃຈພຍາຍາມເມື່ອປວດອຸຈຈາຣະ ນ້ຳອສຸຈິເຄື່ອນ ຕ້ອງອາບັຕິສັງຂາທິເສສ
(໓) ພິກຂຸຈົງໃຈພຍາຍາມເມື່ອປວດປັສສາວະ ນ້ຳອສຸຈິເຄື່ອນ ຕ້ອງອາບັຕິສັງຂາທິເສສ
(໔) ພິກຂຸຈົງໃຈພຍາຍາມເມື່ອຕ້ອງລົມ ນ້ຳອສຸຈິເຄື່ອນ ຕ້ອງອາບັຕິສັງຂາທິເສສ
(໕) ພິກຂຸຈົງໃຈພຍາຍາມເມື່ອຖືກບົ້ງຂົນ ນ້ຳອສຸຈິເຄື່ອນ ຕ້ອງອາບັຕິສັງຂາທິເສສ

## ເຈຕນາ ໑໐ ຢ່າງ

(໑) ພິກຂຸຈົງໃຈພຍາຍາມ ເພື່ອຄວາມຫາຍໂຣຄ ນ້ຳອສຸຈິເຄື່ອນ ຕ້ອງອາບັຕິສັງຂາທິເສສ (໒) ພິກຂຸຈົງໃຈພຍາຍາມເພື່ອຄວາມສຸຂ (໓) ...ເພື່ອເປັນຢາ (໔) ...ເພື່ອເປັນທານ (໕) ...ເພື່ອເປັນບຸນ (໖) ...ເພື່ອບູຊາຍັນ (໗) ...ເພື່ອຈະໄປສວັນຄ໌ (໘) ...ເພື່ອສືບພັນທຸ໌ (໙) ...ເພື່ອທົດລອງ (໑໐) ...ເພື່ອຄວາມສນຸກ ນ້ຳອສຸຈິເຄື່ອນ ຕ້ອງອາບັຕິສັງຂາທິເສສ

## ວັຕຖຸປະສົງຄ໌ ໑໐ ຢ່າງ

(໑) ພິກຂຸຈົງໃຈພຍາຍາມ ນ້ຳອສຸຈິສີຂຽວເຄື່ອນ ຕ້ອງອາບັຕິສັງຂາທິເສສ (໒) ພິກຂຸຈົງໃຈພຍາຍາມ ນ້ຳອສຸຈິສີເຫລືອງ (໓) ...ນ້ຳອສຸຈິສີແດງ (໔) ...ນ້ຳອສຸຈິສີຂາວ (໕) ...ນ້ຳອສຸຈິສີເຫມືອນປຽງ (໖) ...ນ້ຳອສຸຈິສີເຫມືອນນ້ຳທ່າ (໗) ...ນ້ຳອສຸຈິສີເຫມືອນນ້ຳມັນ (໘) ...ນ້ຳອສຸຈິສີເຫມືອນນົມສົດ (໙) ...ນ້ຳອສຸຈິສີເຫມືອນນົມສົ້ມ (໑໐) ...ນ້ຳອສຸຈິສີເຫມືອນເນີຍໃສເຄື່ອນ ຕ້ອງອາບັຕິສັງຂາທິເສສ

## ສຸທທິກ ຈົບ

## ຂັນທຈັກຣ
## ມີເຈຕນາຢ່າງດຽວເປັນມູລ

ພິກຂຸຈົງໃຈພຍາຍາມ ເພື່ອຄວາມຫາຍໂຣຄແລະເພື່ອຄວາມສຸຂ ນ້ຳອສຸຈິເຄື່ອນ ຕ້ອງອາບັຕິສັງຂາທິເສສ
ພິກຂຸຈົງໃຈພຍາຍາມ ເພື່ອຄວາມຫາຍໂຣຄແລະເພື່ອເປັນຢາ ຯລຯ ເພື່ອຄວາມຫາຍໂຣຄແລະ

ເພື່ອເປັນທານ ຯລຯ ເພື່ອຄວາມຫາຍໂຣຄແລະເພື່ອເປັນບຸນ ຯລຯ ເພື່ອຄວາມຫາຍໂຣຄແລະເພື່ອບູຊາຍັນ ຯລຯ ເພື່ອຄວາມຫາຍໂຣຄແລະເພື່ອຈະໄປສວັນຄ໌ ຯລຯ ເພື່ອຄວາມຫາຍໂຣຄແລະເພື່ອສືບພັນທຸ໌ ຯລຯ ເພື່ອຄວາມຫາຍໂຣຄແລະເພື່ອທົດລອງ ຯລຯ ພິກສຸຈົງໃຈພຍາຍາມເພື່ອຄວາມຫາຍໂຣຄແລະເພື່ອຄວາມສນຸກ ນ້ຳອສຸຈິເຄື່ອນ ຕ້ອງອາບັຕິສັງຂາທິເສສ

ຂັນຫຈັກຣມີເຈຕນາຢ່າງດຽວເປັນມູລ ຈົບ

## ພຣະວິນັຍປິດົກ ມຫາວິພັງຄ໌ [໔. ສັງຂາທິເສສກັນທ໌] ໑. ສຸກກວິສັຕຖິສິກຂາບົທ ບົທພາຊນີຍ໌ ພັທຫຈັກຣ

## ມີເຈຕນາຢ່າງດຽວເປັນມູລ ຫມວດທີ ໑

[໔໔໑] ພິກສຸຈົງໃຈພຍາຍາມ ເພື່ອຄວາມສຸຂແລະເພື່ອເປັນຢາ ນ້ຳອສຸຈິເຄື່ອນຕ້ອງອາບັຕິສັງຂາທິເສສ

ພິກສຸຈົງໃຈພຍາຍາມ ເພື່ອຄວາມສຸຂແລະເພື່ອເປັນທານ ຯລຯ ເພື່ອຄວາມສຸຂແລະເພື່ອເປັນບຸນ ຯລຯ ເພື່ອຄວາມສຸຂແລະເພື່ອບູຊາຍັນ ຯລຯ ເພື່ອຄວາມສຸຂແລະເພື່ອຈະໄປສວັນຄ໌ ຯລຯ ເພື່ອຄວາມສຸຂແລະເພື່ອສືບພັນທຸ໌ ຯລຯ ເພື່ອຄວາມສຸຂແລະເພື່ອທົດລອງ ຯລຯ ພິກສຸຈົງໃຈພຍາຍາມເພື່ອຄວາມສຸຂແລະເພື່ອຄວາມສນຸກ ນ້ຳອສຸຈິເຄື່ອນ ຕ້ອງອາບັຕິສັງຂາທິເສສ

ພິກສຸຈົງໃຈພຍາຍາມເພື່ອຄວາມສຸຂແລະເພື່ອຄວາມຫາຍໂຣຄ ນ້ຳອສຸຈິເຄື່ອນ ຕ້ອງອາບັຕິສັງຂາທິເສສ

## ມີເຈຕນາຢ່າງດຽວເປັນມູລ ຫມວດທີ ໔

[໔໔໔] ພິກສຸຈົງໃຈພຍາຍາມ ເພື່ອເປັນຢາແລະເພື່ອເປັນທານ ນ້ຳອສຸຈິເຄື່ອນຕ້ອງອາບັຕິສັງຂາທິເສສ

ພິກສຸຈົງໃຈພຍາຍາມ ເພື່ອເປັນຢາແລະເພື່ອເປັນບຸນ ຯລຯ ເພື່ອເປັນຢາແລະເພື່ອບູຊາຍັນ ຯລຯ ເພື່ອເປັນຢາແລະເພື່ອຈະໄປສວັນຄ໌ ຯລຯ ເພື່ອເປັນຢາແລະເພື່ອສືບພັນທຸ໌ ຯລຯ ເພື່ອເປັນຢາແລະເພື່ອທົດລອງ ຯລຯ ພິກສຸຈົງໃຈພຍາຍາມເພື່ອເປັນຢາແລະເພື່ອຄວາມສນຸກ ນ້ຳອສຸຈິເຄື່ອນ ຕ້ອງ

ອາບັຕິສັງຄາທິເສສ
ພິກສຸຈົງໃຈພຍາຍາມ ເພື່ອເປັນຢາແລະເພື່ອຄວາມຫາຍໄອຣ ຯລຯ ພິກສຸຈົງໃຈພຍາຍາມເພື່ອເປັນຢາແລະເພື່ອຄວາມສຸຂ ນ້ຳອສຸຈິເຄື່ອນ ຕ້ອງອາບັຕິສັງຄາທິເສສ

## ມີເຈຕນາຢ່າງດຽວເປັນມູລ ໝວດທີ ໓

ພິກສຸຈົງໃຈພຍາຍາມ ເພື່ອເປັນທານແລະເພື່ອເປັນບຸນ ນ້ຳອສຸຈິເຄື່ອນ ຕ້ອງອາບັຕິສັງຄາທິເສສ
ພິກສຸຈົງໃຈພຍາຍາມ ເພື່ອເປັນທານແລະເພື່ອບູຊາຍັນ ຯລຯ ເພື່ອເປັນທານແລະເພື່ອຈະໄປສວັນຄ໌ ຯລຯ ເພື່ອເປັນທານແລະເພື່ອສືບພັນທຸ໌ ຯລຯ ເພື່ອເປັນທານແລະເພື່ອທົດລອງ ຯລຯ
ພິກສຸຈົງໃຈພຍາຍາມເພື່ອເປັນທານແລະເພື່ອຄວາມສນຸກ ນ້ຳອສຸຈິເຄື່ອນ ຕ້ອງອາບັຕິສັງຄາທິເສສ
ພິກສຸຈົງໃຈພຍາຍາມ ເພື່ອເປັນທານແລະເພື່ອຄວາມຫາຍໄອຣ ຯລຯ ພິກສຸຈົງໃຈພຍາຍາມເພື່ອເປັນທານແລະເພື່ອຄວາມສຸຂ ຯລຯ ເພື່ອເປັນທານແລະເພື່ອເປັນຢາ ນ້ຳອສຸຈິເຄື່ອນ ຕ້ອງອາບັຕິສັງຄາທິເສສ

## ມີເຈຕນາຢ່າງດຽວເປັນມູລ ໝວດທີ ໔

ພິກສຸຈົງໃຈພຍາຍາມ ເພື່ອເປັນບຸນແລະເພື່ອບູຊາຍັນ ນ້ຳອສຸຈິເຄື່ອນ ຕ້ອງອາບັຕິສັງຄາທິເສສ
ພິກສຸຈົງໃຈພຍາຍາມ ເພື່ອເປັນບຸນແລະເພື່ອຈະໄປສວັນຄ໌ ຯລຯ ເພື່ອເປັນບຸນແລະເພື່ອສືບພັນທຸ໌ ຯລຯ ເພື່ອເປັນບຸນແລະເພື່ອທົດລອງ ຯລຯ ພິກສຸຈົງໃຈພຍາຍາມເພື່ອເປັນບຸນແລະເພື່ອຄວາມສນຸກ ນ້ຳອສຸຈິເຄື່ອນ ຕ້ອງອາບັຕິສັງຄາທິເສສ
ພິກສຸຈົງໃຈພຍາຍາມ ເພື່ອເປັນບຸນແລະເພື່ອຄວາມຫາຍໄອຣ ຯລຯ ເພື່ອເປັນບຸນແລະເພື່ອຄວາມສຸຂ ຯລຯ ເພື່ອເປັນບຸນແລະເພື່ອເປັນຢາ ຯລຯ ພິກສຸຈົງໃຈພຍາຍາມເພື່ອເປັນບຸນແລະເພື່ອເປັນທານ ນ້ຳອສຸຈິເຄື່ອນ ຕ້ອງອາບັຕິສັງຄາທິເສສ

## ມີເຈຕນາຢ່າງດຽວເປັນມູລ ໝວດທີ ໕

ພິກສຸຈົງໃຈພຍາຍາມ ເພື່ອບູຊາຍັນແລະເພື່ອຈະໄປສວັນຄ໌ ນ້ຳອສຸຈິເຄື່ອນ ຕ້ອງອາບັຕິສັງຄາທິເສສ
ພິກສຸຈົງໃຈພຍາຍາມ ເພື່ອບູຊາຍັນແລະເພື່ອສືບພັນທຸ໌ ຯລຯ ເພື່ອບູຊາຍັນແລະເພື່ອທົດລອງ ຯລຯ ພິກສຸຈົງໃຈພຍາຍາມເພື່ອບູຊາຍັນແລະເພື່ອຄວາມສນຸກ ນ້ຳອສຸຈິເຄື່ອນຕ້ອງອາບັຕິ

ສັງຂາທິເສສ

ພິກສຸຈົງໃຈພຍາຍາມ ເພື່ອບູຊາຍັນແລະເພື່ອຄວາມຫາຍໂຣຄ ຯລຯ ເພື່ອບູຊາຍັນແລະເພື່ອຄວາມສຸຂ ຯລຯ ເພື່ອບູຊາຍັນແລະເພື່ອເປັນຢາ ຯລຯ ເພື່ອບູຊາຍັນແລະເພື່ອເປັນທານ.. ພິກສຸຈົງໃຈພຍາຍາມເພື່ອບູຊາຍັນແລະເພື່ອເປັນບຸນ ນ້ຳອສຸຈິເຄື່ອນ ຕ້ອງອາບັຕິສັງຂາທິເສສ

## ມີເຈຕນາຢ່າງດຽວເປັນມູລ ຫມວດທີ ໘

ພິກສຸຈົງໃຈພຍາຍາມ ເພື່ອຈະໄປສວັນຄ໌ແລະເພື່ອສືບພັນຫຸ໌ ຯລຯ ເພື່ອຈະໄປສວັນຄ໌ແລະເພື່ອທົດລອງ ຯລຯ ພິກສຸຈົງໃຈພຍາຍາມເພື່ອຈະໄປສວັນຄ໌ແລະເພື່ອຄວາມສນຸກ ນ້ຳອສຸຈິເຄື່ອນ ຕ້ອງອາບັຕິສັງຂາທິເສສ

ພິກສຸຈົງໃຈພຍາຍາມ ເພື່ອຈະໄປສວັນຄ໌ແລະເພື່ອຄວາມຫາຍໂຣຄ ຯລຯ ເພື່ອຈະໄປສວັນຄ໌ແລະເພື່ອຄວາມສຸຂ ຯລຯ ເພື່ອຈະໄປສວັນຄ໌ແລະເພື່ອເປັນຢາ ຯລຯ ເພື່ອຈະໄປສວັນຄ໌ແລະເພື່ອເປັນທານ ຯລຯ ເພື່ອຈະໄປສວັນຄ໌ແລະເພື່ອເປັນບຸນ ຯລຯ ພິກສຸຈົງໃຈພຍາຍາມເພື່ອຈະໄປສວັນຄ໌ແລະເພື່ອບູຊາຍັນ ນ້ຳອສຸຈິເຄື່ອນ ຕ້ອງອາບັຕິສັງຂາທິເສສ

## ມີເຈຕນາຢ່າງດຽວເປັນມູລ ຫມວດທີ ໗

ພິກສຸຈົງໃຈພຍາຍາມ ເພື່ອສືບພັນຫຸ໌ແລະເພື່ອທົດລອງ ຯລຯ ເພື່ອສືບພັນຫຸ໌ແລະເພື່ອຄວາມສນຸກ ນ້ຳອສຸຈິເຄື່ອນ ຕ້ອງອາບັຕິສັງຂາທິເສສ

ພິກສຸຈົງໃຈພຍາຍາມ ເພື່ອສືບພັນຫຸ໌ແລະເພື່ອຄວາມຫາຍໂຣຄ ຯລຯ ເພື່ອສືບພັນຫຸ໌ແລະເພື່ອຄວາມສຸຂ ຯລຯ ເພື່ອສືບພັນຫຸ໌ແລະເພື່ອເປັນຢາ ຯລຯ ເພື່ອສືບພັນຫຸ໌ແລະເພື່ອເປັນທານ ຯລຯ ເພື່ອສືບພັນຫຸ໌ແລະເພື່ອເປັນບຸນ ຯລຯ ເພື່ອສືບພັນຫຸ໌ແລະເພື່ອບູຊາຍັນ ຯລຯ ພິກສຸຈົງໃຈພຍາຍາມເພື່ອສືບພັນຫຸ໌ແລະເພື່ອຈະໄປສວັນຄ໌ ນ້ຳອສຸຈິເຄື່ອນ ຕ້ອງອາບັຕິສັງຂາທິເສສ

## ມີເຈຕນາຢ່າງດຽວເປັນມູລ ຫມວດທີ ໗ຼ

ພິກສຸຈົງໃຈພຍາຍາມ ເພື່ອທົດລອງແລະເພື່ອຄວາມສນຸກ ນ້ຳອສຸຈິເຄື່ອນ ຕ້ອງອາບັຕິສັງຂາທິເສສ

ພິກສຸຈົງໃຈພຍາຍາມ ເພື່ອທົດລອງແລະເພື່ອຄວາມຫາຍໂຣຄ ຯລຯ ເພື່ອທົດລອງແລະເພື່ອຄວາມສຸຂ ຯລຯ ເພື່ອທົດລອງແລະເພື່ອເປັນຢາ ຯລຯ ເພື່ອທົດລອງແລະເພື່ອເປັນທານ ຯລຯ

ເພື່ອທົດລອງແລະເພື່ອເປັນບຸນ ຯລຯ ເພື່ອທົດລອງແລະເພື່ອບູຊາຍັນ ຯລຯ ເພື່ອທົດລອງແລະເພື່ອຈະໄປສວັນຄ໌ ຯລຯ ພິກສຸຈົງໃຈພຍາຍາມເພື່ອທົດລອງແລະເພື່ອສືບພັນທຸ໌ ນ້ຳອສຸຈິເຄື່ອນຕ້ອງອາບັຕິສັງຄາທິເສສ

ມີເຈຕນາຢ່າງດຽວເປັນມູລ ໝວດທີ ໙

ພິກສຸຈົງໃຈພຍາຍາມ ເພື່ອຄວາມສນຸກແລະເພື່ອຄວາມຫາຍໂຣຄ ນ້ຳອສຸຈິເຄື່ອນຕ້ອງອາບັຕິສັງຄາທິເສສ

ພິກສຸຈົງໃຈພຍາຍາມ ເພື່ອຄວາມສນຸກແລະເພື່ອຄວາມສຸຂ ຯລຯ ເພື່ອຄວາມສນຸກແລະເພື່ອເປັນຢາ ຯລຯ ເພື່ອຄວາມສນຸກແລະເພື່ອເປັນທານ ຯລຯ ເພື່ອຄວາມສນຸກແລະເພື່ອເປັນບຸນ ຯລຯ ເພື່ອຄວາມສນຸກແລະເພື່ອບູຊາຍັນ ຯລຯ ເພື່ອຄວາມສນຸກແລະເພື່ອຈະໄປສວັນຄ໌ ຯລຯ ເພື່ອຄວາມສນຸກແລະເພື່ອສືບພັນທຸ໌ ຯລຯ ພິກສຸຈົງໃຈພຍາຍາມເພື່ອຄວາມສນຸກແລະເພື່ອທົດລອງ ນ້ຳອສຸຈິເຄື່ອນ ຕ້ອງອາບັຕິສັງຄາທິເສສ

ພັທທຈັກຣມີເຈຕນາຢ່າງດຽວເປັນມູລ ຈົບ

ຂັນທຈັກຣ

ມີເຈຕນາ ໔ ຢ່າງເປັນມູລ

ພິກສຸຈົງໃຈພຍາຍາມ ເພື່ອຄວາມຫາຍໂຣຄ ເພື່ອຄວາມສຸຂແລະເພື່ອເປັນຢາ ນ້ຳອສຸຈິເຄື່ອນຕ້ອງອາບັຕິສັງຄາທິເສສ ຯລຯ ພິກສຸຈົງໃຈພຍາຍາມເພື່ອຄວາມຫາຍໂຣຄ ເພື່ອຄວາມສຸຂແລະເພື່ອຄວາມສນຸກ ນ້ຳອສຸຈິເຄື່ອນ ຕ້ອງອາບັຕິສັງຄາທິເສສ

ຂັນທຈັກຣມີເຈຕນາ ໔ ຢ່າງເປັນມູລ ຈົບ

ພັທທຈັກຣ

ມີເຈຕນາ ໔ ຢ່າງເປັນມູລ ໝວດທີ ໑

ພິກສຸຈົງໃຈພຍາຍາມ ເພື່ອຄວາມສຸຂ ເພື່ອເປັນຢາແລະເພື່ອເປັນທານ ນ້ຳອສຸຈິເຄື່ອນຕ້ອງອາບັຕິສັງຂາທິເສສ
ພິກສຸຈົງໃຈພຍາຍາມ ເພື່ອຄວາມສຸຂ ເພື່ອເປັນຢາແລະເພື່ອຄວາມສນຸກ ຯລຯ ພິກສຸຈົງໃຈພຍາຍາມເພື່ອຄວາມສຸຂ ເພື່ອເປັນຢາແລະເພື່ອຄວາມຫາຍໂຣຄ ນ້ຳອສຸຈິເຄື່ອນ ຕ້ອງອາບັຕິສັງຂາທິເສສ

ພັທທຈັກຣມີເຈຕນາ ໔ ຢ່າງເປັນມູລ ຫຍໍ້ໄວ້ແລ້ວ

ມີເຈຕນາ ໔ ຢ່າງເປັນມູລ

ພິກສຸຈົງໃຈພຍາຍາມ ເພື່ອທົດລອງ ເພື່ອຄວາມສນຸກແລະເພື່ອຄວາມຫາຍໂຣຄ ນ້ຳອສຸຈິເຄື່ອນຕ້ອງອາບັຕິສັງຂາທິເສສ ຯລຯ ພິກສຸຈົງໃຈພຍາຍາມເພື່ອທົດລອງ ເພື່ອຄວາມສນຸກແລະເພື່ອສືບພັນທຸ໌ ນ້ຳອສຸຈິເຄື່ອນ ຕ້ອງອາບັຕິສັງຂາທິເສສ

ພັທທຈັກຣມີເຈຕນາ ໔ ຢ່າງເປັນມູລ ຈົບ

ພັທທຈັກຣ ຕິມູລກນັຍກໍດີ ຈຕຸມູລກນັຍກໍດີ ປັຢຈມູລກນັຍກໍດີ ສມູລກນັຍກໍດີ ສັຕຕມູລກນັຍກໍດີ ອັຕຖມູລກນັຍກໍດີ ນວມູລກນັຍກໍດີ ບັນທິຕເພິງຕັ້ງຂຍາຍໃຫ້ເຫມືອນກັນ ຄຳທີ່ຈະກ່າວຕໍ່ໄປນີ້ເປັນພັທທຈັກຣສັພພມູລກນັຍ

ສັພພມູລກນັຍ

[໔໕໓] ພິກສຸຈົງໃຈພຍາຍາມ ເພື່ອຄວາມຫາຍໂຣຄ ເພື່ອຄວາມສຸຂ ເພື່ອເປັນຢາເພື່ອເປັນທານ ເພື່ອເປັນບຸນ ເພື່ອບູຊາຍັນ ເພື່ອຈະໄປສວັນຄ໌ ເພື່ອສືບພັນທຸ໌ ເພື່ອທົດລອງແລະເພື່ອຄວາມສນຸກ ນ້ຳອສຸຈິເຄື່ອນ ຕ້ອງອາບັຕິສັງຂາທິເສສ

ສັພພມູລກນັຍ ຈົບ

ຂັນທຈັກຣ
ມີວັຕຖຸປະສົງຄ໌ຢ່າງດຽວເປັນມູລ

[໒໔໔] ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີຂຽວແລະສີເຫລືອງເຄື່ອນ ຕ້ອງອາບັຕິສັງຂາທິເສສ ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີຂຽວແລະສີແດງ ຯລຯ ນ້ຳອສຸຈິສີຂຽວແລະສີຂາວ ຯລຯ ນ້ຳອສຸຈິສີຂຽວແລະສີເຫມືອນປຽງ ຯລຯ ນ້ຳອສຸຈິສີຂຽວແລະສີເຫມືອນນ້ຳທ່າ ຯລຯ ນ້ຳອສຸຈິສີຂຽວແລະສີເຫມືອນນ້ຳມັນ ຯລຯ ນ້ຳອສຸຈິສີຂຽວແລະສີເຫມືອນນົມສົດ ຯລຯ ນ້ຳອສຸຈິສີຂຽວແລະສີເຫມືອນນົມສົ້ມ ຯລຯ ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີຂຽວແລະສີເຫມືອນເນີຍໃສເຄື່ອນ ຕ້ອງອາບັຕິສັງຂາທິເສສ

ຂັນຫຈັກຣມີວັຕຖຸປະສົງຄ໌ຢ່າງດຽວເປັນມູລ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ສັງຂາທິເສສກັນຫ໌] ໑. ສຸກກວິສັຕຖິສິກຂາບົທ ບົທພາຊນີຍ໌
ພັທຫຈັກຣແຫ່ງເອກມູລກນັຍ

[໒໔໕] ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີເຫລືອງແລະສີແດງເຄື່ອນ ຕ້ອງອາບັຕິສັງຂາທິເສສ ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີເຫລືອງແລະສີຂາວ ຯລຯ ນ້ຳອສຸຈິສີເຫລືອງແລະສີເຫມືອນປຽງ ຯລຯ ນ້ຳອສຸຈິສີເຫລືອງແລະສີເຫມືອນນ້ຳທ່າ ຯລຯ ນ້ຳອສຸຈິສີເຫລືອງແລະສີເຫມືອນນ້ຳມັນ ຯລຯ ນ້ຳອສຸຈິສີເຫລືອງແລະສີເຫມືອນນົມສົດ ຯລຯ ນ້ຳອສຸຈິສີເຫລືອງແລະສີເຫມືອນນົມສົ້ມ ຯລຯ ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີເຫລືອງແລະສີເຫມືອນເນີຍໃສເຄື່ອນ ຕ້ອງອາບັຕິສັງຂາທິເສສ ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີເຫລືອງແລະສີຂຽວເຄື່ອນ ຕ້ອງອາບັຕິສັງຂາທິເສສ

ພັທຫຈັກຣແຫ່ງເອກມູລກນັຍ ຈົບ

ພັທຫຈັກຣ
ມີວັຕຖຸປະສົງຄ໌ຢ່າງດຽວເປັນມູລ ຫມວດທີ ໑

[໒໔໖] ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີແດງແລະສີຂາວເຄື່ອນ ຕ້ອງອາບັຕິສັງຂາທິເສສ ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີແດງແລະສີເຫມືອນປຽງ ຯລຯ ນ້ຳອສຸຈິສີແດງແລະສີເຫມືອນນ້ຳທ່າ ຯລຯ ນ້ຳອສຸຈິສີແດງແລະສີເຫມືອນນ້ຳມັນ ຯລຯ ນ້ຳອສຸຈິສີແດງແລະສີເຫມືອນນົມສົດ

ຯລຯ ນ້ຳອສຸຈິສີແດງແລະສີເຫມືອນນົມສົ້ມ ຯລຯ ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີແດງແລະສີເຫມືອນເນີຍໃສເຄື່ອນ ຕ້ອງອາບັຕິສັງຂາທິເສສ
ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີແດງແລະສີຂຽວ ຯລຯ ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີແດງແລະສີເຫລືອງເຄື່ອນ ຕ້ອງອາບັຕິສັງຂາທິເສສ

ມີວັຕຖຸປະສົງຄ໌ຢ່າງດຽວເປັນມູລ ຫມວດທີ ໔

ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີຂາວແລະສີເຫມືອນປຽງ ຯລຯ ນ້ຳອສຸຈິສີຂາວແລະສີເຫມືອນນ້ຳທ່າ ຯລຯ ນ້ຳອສຸຈິສີຂາວແລະສີເຫມືອນນ້ຳມັນ ຯລຯ ນ້ຳອສຸຈິສີຂາວແລະສີເຫມືອນນົມສົດ ຯລຯ ນ້ຳອສຸຈິສີຂາວແລະສີເຫມືອນນົມສົ້ມ ຯລຯ ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີຂາວແລະສີເຫມືອນເນີຍໃສເຄື່ອນ ຕ້ອງອາບັຕິສັງຂາ ທິເສສ
ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີຂາວແລະສີຂຽວ ຯລຯ ນ້ຳອສຸຈິສີຂາວແລະສີເຫລືອງ ຯລຯ ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີຂາວແລະສີແດງເຄື່ອນ ຕ້ອງອາບັຕິສັງຂາທິເສສ

ມີວັຕຖຸປະສົງຄ໌ຢ່າງດຽວເປັນມູລ ຫມວດທີ ៥

ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີເຫມືອນປຽງແລະສີເຫມືອນນ້ຳທ່າ ຯລຯ ນ້ຳອສຸຈິສີເຫມືອນປຽງແລະສີເຫມືອນນ້ຳມັນ ຯລຯ ນ້ຳອສຸຈິສີເຫມືອນປຽງແລະສີເຫມືອນນົມສົດ ຯລຯ ນ້ຳອສຸຈິສີເຫມືອນປຽງແລະສີເຫມືອນນົມສົ້ມ ຯລຯ ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີເຫມືອນປຽງແລະສີເຫມືອນເນີຍໃສເຄື່ອນ ຕ້ອງອາບັຕິສັງຂາທິເສສ
ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີເຫມືອນປຽງແລະສີຂຽວ ຯລຯ ນ້ຳອສຸຈິສີເຫມືອນປຽງແລະສີເຫລືອງ ຯລຯ ນ້ຳອສຸຈິສີເຫມືອນປຽງແລະສີແດງ ຯລຯ ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີເຫມືອນປຽງແລະສີຂາວເຄື່ອນ ຕ້ອງອາບັຕິສັງຂາທິເສສ

ມີວັຕຖຸປະສົງຄ໌ຢ່າງດຽວເປັນມູລ ຫມວດທີ ໔

ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີເຫມືອນນ້ຳທ່າແລະສີເຫມືອນນ້ຳມັນ ຯລຯ ນ້ຳອສຸຈິສີເຫມືອນນ້ຳທ່າແລະສີເຫມືອນນົມສົດ ຯລຯ ນ້ຳອສຸຈິສີເຫມືອນນ້ຳທ່າແລະສີເຫມືອນນົມສົ້ມ ຯລຯ ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີເຫມືອນນ້ຳທ່າແລະສີເຫມືອນເນີຍໃສເຄື່ອນ ຕ້ອງອາບັຕິສັງຂາທິເສສ

ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີເໝືອນນ້ຳທ່າແລະສີຂຽວ ຯລຯ ນ້ຳອສຸຈິສີເໝືອນນ້ຳທ່າແລະສີເຫລືອງ...ນ້ຳອສຸຈິສີເໝືອນນ້ຳທ່າແລະສີແດງ ຯລຯ ນ້ຳອສຸຈິສີເໝືອນນ້ຳທ່າແລະສີຂາວ ຯລຯ ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີເໝືອນນ້ຳທ່າແລະສີເໝືອນປຽງເຄື່ອນ ຕ້ອງອາບັຕິສັງຄາທິເສສ

### ມີວັຕຖຸປະສົງຄ໌ຢ່າງດຽວເປັນມູລ ຫມວດທີ ໕

ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີເໝືອນນ້ຳມັນແລະສີເໝືອນນົມສົດ ຯລຯ ນ້ຳອສຸຈິສີເໝືອນນ້ຳມັນແລະສີເໝືອນນົມສົ້ມ ຯລຯ ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີເໝືອນນ້ຳມັນແລະສີເໝືອນເນີຍໃສເຄື່ອນ ຕ້ອງອາບັຕິສັງຄາທິເສສ

ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີເໝືອນນ້ຳມັນແລະສີຂຽວ ຯລຯ ນ້ຳອສຸຈິສີເໝືອນນ້ຳມັນແລະສີເຫລືອງ...ນ້ຳອສຸຈິສີເໝືອນນ້ຳມັນແລະສີແດງ ຯລຯ ນ້ຳອສຸຈິສີເໝືອນນ້ຳມັນແລະສີຂາວ ຯລຯ ນ້ຳອສຸຈິສີເໝືອນນ້ຳມັນແລະສີເໝືອນປຽງ ຯລຯ ພິກສຸຈົງໃຈພຍາຍາມນ້ຳອສຸຈິສີເໝືອນນ້ຳມັນແລະສີເໝືອນນ້ຳທ່າເຄື່ອນ ຕ້ອງອາບັຕິສັງຄາທິເສສ

### ມີວັຕຖຸປະສົງຄ໌ຢ່າງດຽວເປັນມູລ ຫມວດທີ ໖

ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີເໝືອນນົມສົດແລະສີເໝືອນນົມສົ້ມ ຯລຯ ນ້ຳອສຸຈິສີເໝືອນນົມສົດແລະສີເໝືອນເນີຍໃສເຄື່ອນ ຕ້ອງອາບັຕິສັງຄາທິເສສ
ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີເໝືອນນົມສົດແລະສີຂຽວ ຯລຯ ນ້ຳອສຸຈິສີເໝືອນນົມສົດແລະສີເຫລືອງ ຯລຯ ນ້ຳອສຸຈິສີເໝືອນນົມສົດແລະສີແດງ ຯລຯ ນ້ຳອສຸຈິສີເໝືອນນົມສົດແລະສີຂາວ ຯລຯ ນ້ຳອສຸຈິສີເໝືອນນົມສົດແລະສີເໝືອນປຽງ ຯລຯ ນ້ຳອສຸຈິສີເໝືອນນົມສົດແລະສີເໝືອນນ້ຳທ່າ ຯລຯ ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີເໝືອນນົມສົດແລະສີເໝືອນນ້ຳມັນເຄື່ອນ ຕ້ອງອາບັຕິສັງຄາທິເສສ

### ມີວັຕຖຸປະສົງຄ໌ຢ່າງດຽວເປັນມູລ ຫມວດທີ ໗

ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີເໝືອນນົມສົ້ມແລະສີເໝືອນເນີຍໃສເຄື່ອນ ຕ້ອງອາບັຕິສັງຄາທິເສສ
ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີເໝືອນນົມສົ້ມແລະສີຂຽວ ຯລຯ ນ້ຳອສຸຈິສີເໝືອນນົມສົ້ມແລະສີ

ເຫລືອງ ຯລຯ ນ້ຳອສຸຈິສີເໝືອນນົມສົ້ມແລະສີແດງ ຯລຯ ອສຸຈິສີເໝືອນນົມສົ້ມແລະສີຂາວ ຯລຯ ນ້ຳອສຸຈິສີເໝືອນນົມສົ້ມແລະສີເໝືອນປຽງ ຯລຯ ນ້ຳອສຸຈິສີເໝືອນນົມສົ້ມແລະສີເໝືອນນ້ຳທ່າ ຯລຯ ນ້ຳອສຸຈິສີເໝືອນນົມສົ້ມແລະສີເໝືອນນ້ຳມັນ ຯລຯ ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີເໝືອນນົມສົ້ມແລະສີເໝືອນນົມສົດເຄື່ອນ ຕ້ອງອາບັຕິສັງຄາທິເສສ

ນິວັຕຖຸປະສົງຄ໌ຢ່າງດຽວເປັນມູລ ຫມວດທີ ໗

ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີເໝືອນເນີຍໃສແລະສີຂຽວເຄື່ອນ ຕ້ອງອາບັຕິສັງຄາທິເສສ ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີເໝືອນເນີຍໃສແລະສີເຫລືອງ ຯລຯ ນ້ຳອສຸຈິສີເໝືອນເນີຍໃສແລະສີແດງ ຯລຯ ນ້ຳອສຸຈິສີເໝືອນເນີຍໃສແລະສີຂາວ ຯລຯ ອສຸຈິສີເໝືອນເນີຍໃສແລະສີເໝືອນປຽງ ຯລຯ ນ້ຳອສຸຈິສີເໝືອນເນີຍໃສແລະສີເໝືອນນ້ຳທ່າ ຯລຯ ນ້ຳອສຸຈິສີເໝືອນເນີຍໃສແລະສີເໝືອນນ້ຳມັນ ຯລຯ ນ້ຳອສຸຈິສີເໝືອນເນີຍໃສແລະສີເໝືອນນົມສົດ ຯລຯ ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີເໝືອນເນີຍໃສແລະສີເໝືອນນົມສົ້ມເຄື່ອນ ຕ້ອງອາບັຕິສັງຄາທິເສສ

ພັທທຈັກຣນິວັຕຖຸປະສົງຄ໌ຢ່າງດຽວເປັນມູລ ຈົບ

ຂັນທຈັກຣ
ນິວັຕຖຸປະສົງຄ໌ ໔ ຢ່າງເປັນມູລ

ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີຂຽວ ສີເຫລືອງແລະສີແດງເຄື່ອນ ຕ້ອງອາບັຕິສັງຄາທິເສສ ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີຂຽວ ສີເຫລືອງແລະສີຂາວເຄື່ອນ ຕ້ອງອາບັຕິສັງຄາທິເສສ ຯລຯ ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີຂຽວ ສີເຫລືອງແລະສີເໝືອນເນີຍໃສເຄື່ອນ ຕ້ອງອາບັຕິສັງຄາທິເສສ

ຂັນທຈັກຣນິວັຕຖຸປະສົງຄ໌ ໔ ຢ່າງເປັນມູລ ຈົບ

ພັທທຈັກຣ
ນິວັຕຖຸປະສົງຄ໌ ໔ ຢ່າງເປັນມູລ

ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີເຫລືອງ ສີແດງແລະສີຂາວເຄື່ອນ ຕ້ອງອາບັຕິສັງຂາທິເສສ ຯລຯ ນ້ຳອສຸຈິສີເຫລືອງ ສີແດງ ແລະສີເຫມືອນເນີຍໃສ ຯລຯ ພິກສຸຈົງໃຈພຍາຍາມນ້ຳອສຸຈິສີເຫລືອງ ສີແດງແລະສີຂຽວເຄື່ອນ ຕ້ອງອາບັຕິສັງຂາທິເສສ

ພັທຫຈັກຣມີວັຕຖຸປະສົງຄ໌ ໔ ຢ່າງເປັນມູລ ຫຍໍ້ໄວ້ແລ້ວ

ພັທຫຈັກຣ
ມີວັຕຖຸປະສົງຄ໌ ໔ ຢ່າງເປັນມູລ

ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີເຫມືອນນົມສົ້ມ ສີເຫມືອນເນີຍໃສແລະສີຂຽວເຄື່ອນ ຕ້ອງອາບັຕິສັງຂາທິເສສ ຯລຯ ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີເຫມືອນນົມສົ້ມ ສີເຫມືອນເນີຍໃສແລະສີເຫມືອນນົມສົດເຄື່ອນ ຕ້ອງອາບັຕິສັງຂາທິເສສ

ພັທຫຈັກຣມີວັຕຖຸປະສົງຄ໌ ໔ ຢ່າງເປັນມູລ ຈົບ

ພັທຫຈັກຣ ຕິມູລກນັຍກໍດີ ຈຕຸມູລກນັຍກໍດີ ປັຢຈມູລກນັຍກໍດີ ສມູລກນັຍກໍດີ ສັຕຕມູລກນັຍກໍດີ ອັຕຖມູລກນັຍກໍດີ ນວມູລກນັຍກໍດີ ບັນຫິຕເພິງຕັ້ງຂຍາຍໃຫ້ເຫມືອນກັນ ຄຳທີ່ຈະກ່າວຕໍ່ໄປນີ້ເປັນພັທຫຈັກຣສັພພມູລກນັຍ

ສັພພມູລກນັຍ

[໒໔໗] ພິກສຸຈົງໃຈພຍາຍາມ ນ້ຳອສຸຈິສີຂຽວ ສີເຫລືອງ ສີແດງ ສີຂາວ ສີເຫມືອນປຽງ ສີເຫມືອນນ້ຳທ່າ ສີເຫມືອນນ້ຳມັນ ສີເຫມືອນນົມສົດ ສີເຫມືອນນົມສົ້ມແລະສີເຫມືອນເນີຍໃສເຄື່ອນ ຕ້ອງອາບັຕິສັງຂາທິເສສ

ສັພພມູລກນັຍ ຈົບ

ອຸພໂຕພັທຫມິສສກຈັກຣ

[໒໔໘] ພິກສຸຈົງໃຈພຍາຍາມເພື່ອຄວາມຫາຍໂຣຄ ນ້ຳອສຸຈິສີຂຽວເຄື່ອນ ຕ້ອງອາບັຕິສັງຂາທິເສສ

ພິກສຸຈົງໃຈພຍາຍາມ ເພື່ອຄວາມຫາຍໂອຄແລະເພື່ອຄວາມສຸຂ ນໍ້າອສຸຈິສີຂຽວແລະສີເຫລືອງເຄື່ອນ ຕ້ອງອາບັຕິສັງຂາທິເສສ

ພິກສຸຈົງໃຈພຍາຍາມ ເພື່ອຄວາມຫາຍໂອຄ ເພື່ອຄວາມສຸຂແລະເພື່ອເປັນຢາ ນໍ້າອສຸຈິສີຂຽວ ສີເຫລືອງແລະສີແດງເຄື່ອນ ຕ້ອງອາບັຕິສັງຂາທິເສສ

ພິກສຸຈົງໃຈພຍາຍາມ ເພື່ອຄວາມຫາຍໂອຄ ເພື່ອຄວາມສຸຂ ເພື່ອເປັນຢາແລະເພື່ອເປັນທານ ນໍ້າອສຸຈິສີຂຽວ ສີເຫລືອງ ສີແດງແລະສີຂາວເຄື່ອນ ຕ້ອງອາບັຕິສັງຂາທິເສສ

ພິກສຸຈົງໃຈພຍາຍາມ ເພື່ອຄວາມຫາຍໂອຄ ເພື່ອຄວາມສຸຂ ເພື່ອເປັນຢາ ເພື່ອເປັນທານແລະເພື່ອເປັນບຸນ ນໍ້າອສຸຈິສີຂຽວ ສີເຫລືອງ ສີແດງແລະສີເຫມືອນປຽງເຄື່ອນ ຕ້ອງອາບັຕິສັງຂາທິເສສ

ພິກສຸຈົງໃຈພຍາຍາມ ເພື່ອຄວາມຫາຍໂອຄ ເພື່ອຄວາມສຸຂ ເພື່ອເປັນຢາ ເພື່ອເປັນທານເພື່ອເປັນບຸນ ແລະເພື່ອບູຊາຍັນ ນໍ້າອສຸຈິສີຂຽວ ສີເຫລືອງ ສີແດງ ສີຂາວ ສີເຫມືອນປຽງແລະສີເຫມືອນນໍ້າທ່າເຄື່ອນ ຕ້ອງອາບັຕິສັງຂາທິເສສ

ພິກສຸຈົງໃຈພຍາຍາມ ເພື່ອຄວາມຫາຍໂອຄ ເພື່ອຄວາມສຸຂ ເພື່ອເປັນຢາ ເພື່ອເປັນທານ ເພື່ອເປັນບຸນ ເພື່ອບູຊາຍັນ ແລະເພື່ອຈະໄປສວັນຄ໌ ນໍ້າອສຸຈິສີຂຽວ ສີເຫລືອງ ສີແດງ ສີຂາວສີເຫມືອນປຽງ ສີເຫມືອນນໍ້າທ່າແລະສີເຫມືອນນໍ້າມັນເຄື່ອນ ຕ້ອງອາບັຕິສັງຂາທິເສສ

ພິກສຸຈົງໃຈພຍາຍາມ ເພື່ອຄວາມຫາຍໂອຄ ເພື່ອຄວາມສຸຂ ເພື່ອເປັນຢາ ເພື່ອເປັນທານ ເພື່ອເປັນບຸນ ເພື່ອບູຊາຍັນ ເພື່ອຈະໄປສວັນຄ໌ ແລະເພື່ອສືບພັນທຸ໌ ນໍ້າອສຸຈິສີຂຽວ ສີເຫລືອງສີແດງ ສີຂາວ ສີເຫມືອນປຽງ ສີເຫມືອນນໍ້າທ່າ ສີເຫມືອນນໍ້າມັນ ແລະສີເຫມືອນນົມສົດເຄື່ອນ ຕ້ອງອາບັຕິສັງຂາທິເສສ

ພິກສຸຈົງໃຈພຍາຍາມ ເພື່ອຄວາມຫາຍໂອຄ ເພື່ອຄວາມສຸຂ ເພື່ອເປັນຢາ ເພື່ອເປັນທານ ເພື່ອເປັນບຸນ ເພື່ອບູຊາຍັນ ເພື່ອຈະໄປສວັນຄ໌ ເພື່ອສືບພັນທຸ໌ແລະເພື່ອທົດລອງ ນໍ້າອສຸຈິສີຂຽວສີເຫລືອງ ສີແດງ ສີຂາວ ສີເຫມືອນປຽງ ສີເຫມືອນນໍ້າທ່າ ສີເຫມືອນນໍ້າມັນ ສີເຫມືອນນົມສົດແລະສີເຫມືອນນົມສົ້ມເຄື່ອນ ຕ້ອງອາບັຕິສັງຂາທິເສສ

ພິກສຸຈົງໃຈພຍາຍາມ ເພື່ອຄວາມຫາຍໂຣຄ ເພື່ອຄວາມສຸຂ ເພື່ອເປັນຢາ ເພື່ອເປັນທານ ເພື່ອເປັນບຸນ ເພື່ອບູຊາຍັນ ເພື່ອຈະໄປສວັນຄ໌ ເພື່ອສືບພັນທຸ໌ ເພື່ອທົດລອງ ແລະເພື່ອຄວາມສນຸກ ນ້ຳອສຸຈິສີຂຽວ ສີເຫລືອງ ສີແດງ ສີຂາວ ສີເຫມືອນປຽງ ສີເຫມືອນນ້ຳທ່າ ສີເຫມືອນນ້ຳມັນ ສີເຫມືອນນົມສົດ ສີເຫມືອນນົມສົ້ມ ແລະສີເຫມືອນເນີຍໃສເຄື່ອນ ຕ້ອງອາບັຕິສັງຂາທິເສສ

ອຸພໄຕພັທທມິສສກຈັກຣ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ສັງຂາທິເສສກັນທ໌] ໑. ສຸກກວິສັຕຖິສິກຂາບົທ ບົທພາຊນີຍ໌ ຂັນທຈັກຣ

[໒໔໙] ພິກສຸຈົງໃຈຈະທຳນ້ຳອສຸຈິສີຂຽວໃຫ້ເຄື່ອນ ພຍາຍາມຢູ່ ແຕ່ນ້ຳອສຸຈິສີເຫລືອງເຄື່ອນ ຕ້ອງອາບັຕິສັງຂາທິເສສ

ພິກສຸຈົງໃຈຈະທຳນ້ຳອສຸຈິສີຂຽວໃຫ້ເຄື່ອນ ພຍາຍາມຢູ່ ແຕ່ນ້ຳອສຸຈິສີແດງເຄື່ອນຕ້ອງອາບັຕິສັງຂາທິເສສ

ພິກສຸຈົງໃຈຈະທຳນ້ຳອສຸຈິສີຂຽວໃຫ້ເຄື່ອນ ພຍາຍາມຢູ່ ແຕ່ນ້ຳອສຸຈິສີຂາວເຄື່ອນຕ້ອງອາບັຕິສັງຂາທິເສສ

ພິກສຸຈົງໃຈຈະທຳນ້ຳອສຸຈິສີຂຽວໃຫ້ເຄື່ອນ ພຍາຍາມຢູ່ ແຕ່ນ້ຳອສຸຈິສີເຫມືອນປຽງເຄື່ອນ ຕ້ອງອາບັຕິສັງຂາທິເສສ

ພິກສຸຈົງໃຈຈະທຳນ້ຳອສຸຈິສີຂຽວໃຫ້ເຄື່ອນ ພຍາຍາມຢູ່ ແຕ່ນ້ຳອສຸຈິສີເຫມືອນນ້ຳທ່າເຄື່ອນ ຕ້ອງອາບັຕິສັງຂາທິເສສ

ພິກສຸຈົງໃຈຈະທຳນ້ຳອສຸຈິສີຂຽວໃຫ້ເຄື່ອນ ພຍາຍາມຢູ່ ແຕ່ນ້ຳອສຸຈິສີເຫມືອນນ້ຳມັນເຄື່ອນ ຕ້ອງອາບັຕິສັງຂາທິເສສ

ພິກສຸຈົງໃຈຈະທຳນ້ຳອສຸຈິສີຂຽວໃຫ້ເຄື່ອນ ພຍາຍາມຢູ່ ແຕ່ນ້ຳອສຸຈິສີເຫມືອນນົມສົດເຄື່ອນ ຕ້ອງອາບັຕິສັງຂາທິເສສ

ພິກສຸຈົງໃຈຈະທຳນ້ຳອສຸຈິສີຂຽວໃຫ້ເຄື່ອນ ພຍາຍາມຢູ່ ແຕ່ນ້ຳອສຸຈິສີເຫມືອນນົມສົ້ມເຄື່ອນ ຕ້ອງອາບັຕິສັງຂາທິເສສ

ພິກສຸຈົງໃຈຈະທຳນ້ຳອສຸຈິສີຂຽວໃຫ້ເຄື່ອນ ພຍາຍາມຢູ່ ແຕ່ນ້ຳອສຸຈິສີເຫມືອນເນີຍໃສເຄື່ອນ ຕ້ອງອາບັຕິສັງຂາທິເສສ

ຂັນຖຸຈັກຣ ຈົບ

ພັທຖຸຈັກຣ

[໔໕໐] ພິກສຸຈົງໃຈຈະທຳນ້ຳອສຸຈິສີເຫລືອງໃຫ້ເຄື່ອນ ພຍາຍາມຢູ່ ແຕ່ນ້ຳອສຸຈິສີແດງເຄື່ອນ ຕ້ອງອາບັຕິສັງຂາທິເສສ
ພິກສຸຈົງໃຈຈະທຳນ້ຳອສຸຈິສີເຫລືອງໃຫ້ເຄື່ອນ ພຍາຍາມຢູ່ ແຕ່ນ້ຳອສຸຈິສີຂາວເຄື່ອນ ຯລຯ ນ້ຳອສຸຈິສີເຫມືອນປຽງເຄື່ອນ ຯລຯ ນ້ຳອສຸຈິສີເຫມືອນນ້ຳທ່າເຄື່ອນ ຯລຯ ນ້ຳອສຸຈິສີເຫມືອນນ້ຳມັນເຄື່ອນ ຯລຯ ນ້ຳອສຸຈິສີເຫມືອນນົມສົດເຄື່ອນ ຯລຯ ນ້ຳອສຸຈິສີເຫມືອນນົມສົ້ມເຄື່ອນ ຯລຯ ນ້ຳອສຸຈິສີເຫມືອນເນີຍໃສເຄື່ອນ ຯລຯ ນ້ຳອສຸຈິສີຂຽວເຄື່ອນ ຕ້ອງອາບັຕິສັງຂາທິເສສ

ພິກສຸຈົງໃຈຈະທຳນ້ຳອສຸຈິສີແດງໃຫ້ເຄື່ອນ ພຍາຍາມຢູ່ ແຕ່ນ້ຳອສຸຈິສີຂາວເຄື່ອນ ຕ້ອງອາບັຕິສັງຂາທິເສສ
ພິກສຸຈົງໃຈຈະທຳນ້ຳອສຸຈິສີແດງໃຫ້ເຄື່ອນ ພຍາຍາມຢູ່ ແຕ່ນ້ຳອສຸຈິສີເຫມືອນປຽງເຄື່ອນ ຯລຯ ນ້ຳອສຸຈິສີເຫມືອນນ້ຳທ່າເຄື່ອນ ຯລຯ ນ້ຳອສຸຈິສີເຫມືອນນ້ຳມັນເຄື່ອນ ຯລຯ ນ້ຳອສຸຈິສີເຫມືອນນົມສົດເຄື່ອນ ຯລຯ ນ້ຳອສຸຈິສີເຫມືອນນົມສົ້ມເຄື່ອນ ຯລຯ ນ້ຳອສຸຈິສີເຫມືອນເນີຍໃສເຄື່ອນ ຯລຯ ນ້ຳອສຸຈິສີຂຽວເຄື່ອນ ຯລຯ ນ້ຳອສຸຈິສີເຫລືອງເຄື່ອນ ຕ້ອງອາບັຕິສັງຂາທິເສສ

ພິກສຸຈົງໃຈຈະທຳນ້ຳອສຸຈິສີຂາວໃຫ້ເຄື່ອນ ພຍາຍາມຢູ່ ແຕ່ນ້ຳອສຸຈິສີເຫມືອນປຽງເຄື່ອນ ຕ້ອງອາບັຕິສັງຂາທິເສສ ຯລຯ ນ້ຳອສຸຈິສີແດງເຄື່ອນ ຕ້ອງອາບັຕິສັງຂາທິເສສ ເພິງຊາບຈັກຣທັງຫລາຍຢ່າງນີ້

ພັທຖຸຈັກຣ ຈົບ

ກຸຈສີຈັກຣ
ຫມຸນໄປຂ້າງຫນ້າ

[໔໕໑] ພິກສຸຈົງໃຈຈະທຳນ້ຳອສຸຈິສີເຫມືອນເນີຍໃສໃຫ້ເຄື່ອນ ພຍາຍາມຢູ່ ແຕ່ນ້ຳອສຸຈິສີຂຽວເຄື່ອນ ຕ້ອງອາບັຕິສັງຂາທິເສສ
ພິກສຸຈົງໃຈຈະທຳນ້ຳອສຸຈິສີເຫມືອນເນີຍໃສໃຫ້ເຄື່ອນ ພຍາຍາມຢູ່ ແຕ່ນ້ຳອສຸຈິສີເຫລືອງເຄື່ອນ

ຯລຯ ນ້ຳອສຸຈິສີແດງເຄື່ອນ ຯລຯ ນ້ຳອສຸຈິສີຂາວເຄື່ອນ ຯລຯ ນ້ຳອສຸຈິສີເຫມືອນປຽງເຄື່ອນ ຯລຯ ນ້ຳອສຸຈິສີຫມືອນນ້ຳທ່າເຄື່ອນ ຯລຯ ນ້ຳອສຸຈິສີເຫມືອນນ້ຳມັນເຄື່ອນ ຯລຯ ນ້ຳອສຸຈິສີເຫມືອນນົມສົດເຄື່ອນ ຯລຯ ນ້ຳອສຸຈິສີເຫມືອນນົມສົ້ມ ເຄື່ອນ ຕ້ອງອາບັຕິສັງຂາທິເສສ

ກຸຈສີຈັກຣ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ສັງຂາທິເສສກັນຫ໌] ໑. ສຸກກວິສັຕຖິສິກຂາບົທ ບົທພາຊນີຍ໌
ປິຕຖິຈັກຣ
ຫມຸນໄປຂ້າງຫລັງ

[໔໕໔] ພິກສຸຈິງໃຈຈະທຳນ້ຳອສຸຈິສີເຫລືອງໃຫ້ເຄື່ອນ ພຍາຍາມຢູ່ ແຕ່ນ້ຳອສຸຈິສີຂຽວເຄື່ອນ ຕ້ອງອາບັຕິສັງຂາທິເສສ

ພິກສຸຈິງໃຈຈະທຳນ້ຳອສຸຈິສີແດງໃຫ້ເຄື່ອນ ພຍາຍາມຢູ່ ແຕ່ນ້ຳອສຸຈິສີຂຽວເຄື່ອນຯລຯ ຈິງໃຈຈະທຳນ້ຳອສຸຈິສີຂາວໃຫ້ເຄື່ອນ ພຍາຍາມຢູ່ ແຕ່ນ້ຳອສຸຈິສີຂຽວເຄື່ອນ ຯລຯ

## ພຣະວິນັຍປິດົກ ມຫາວິພັງຄ໌ [໒. ສັງຄາທິເສສກັນຫ໌] ໒. ກາຍສັງສັຄຄສິກຂາບົທ ບົທພາຊນີຍ໌ ອິຕຖີເປຍຍາລ ຍິງຖືກຕ້ອງກາຍຂອງພິກສຸ

[໒໗໗] (໑) ເປັນຍິງ (໒) ພິກສຸສຳຄັນວ່າເປັນຍິງແລະມີຄວາມກຳຫນັດ (໓) ຍິງໃຊ້ກາຍຈັບຕ້ອງ ລູບຄຳ ລູບລົງ ລູບຂຶ້ນ ຈັບກດລົງ ຈັບໃຫ້ເງີຍຂຶ້ນ ດຶງມາ ຍູ້ໄປນວດ ບີບ ຈັບ ຕ້ອງກາຍຂອງພິກສຸ ພິກສຸມີຄວາມປະສົງຄ໌ຈະເສພ ພຍາຍາມດ້ວຍກາຍ ຮັບຮູ້ສັມຜັສ ຕ້ອງອາບັຕິສັງຄາທິເສສ ຯລຯ
(໑) ເປັນຍິງ ໒ ຄົນ (໒) ພິກສຸສຳຄັນວ່າເປັນຍິງທັງ ໒ ຄົນແລະມີຄວາມກຳຫນັດ (໓) ຍິງທັງ ໒ ໃຊ້ກາຍຈັບຕ້ອງ ລູບຄຳ ລູບລົງ ລູບຂຶ້ນ ຈັບກດລົງ ຈັບໃຫ້ເງີຍຂຶ້ນ ດຶງມາ ຍູ້ໄປ ນວດ ບີບ ຈັບ ຕ້ອງກາຍຂອງພິກສຸ ພິກສຸມີຄວາມປະສົງຄ໌ຈະເສພ ພຍາຍາມດ້ວຍກາຍຮັບຮູ້ສັມຜັສ ຕ້ອງອາບັຕິສັງຄາທິເສສ ໒ ຕົວ ຯລຯ
(໑) ເປັນຍິງແລະກະເທີຍ (໒) ພິກສຸສຳຄັນວ່າເປັນຍິງທັງ ໒ ຄົນແລະມີຄວາມກຳຫນັດ (໓) ທັງ

໔ ໃຊ້ກາຍຈັບຕ້ອງ ລູບຄຳ ຯລຯ ຈັບ ຕ້ອງກາຍຂອງພິກສຸ ພິກສຸມີຄວາມປະສົງຄ໌ຈະເສພ ພຍາຍາມດ້ວຍກາຍ ຮັບຮູ້ສັມຜັສ ຕ້ອງທຸກກຕກັບອາບັຕິສັງຂາທິເສສ ຯລຯ

ຍິງຖືກຕ້ອງຂອງທີ່ເນື່ອງດ້ວຍກາຍຂອງພິກສຸ

(໑) ເປັນຍິງ (໔) ພິກສຸສຳຄັນວ່າເປັນຍິງແລະມີຄວາມກຳຫນັດ (໓) ຍິງໃຊ້ກາຍຈັບຕ້ອງ ລູບຄຳ ຯລຯ ຈັບ ຕ້ອງຂອງທີ່ເນື່ອງດ້ວຍກາຍຂອງພິກສຸ ພິກສຸມີຄວາມປະສົງຄ໌ຈະເສພ ພຍາຍາມດ້ວຍກາຍ ຮັບຮູ້ສັມຜັສ ຕ້ອງອາບັຕິຖຸລລັຈຈັຍ ຯລຯ
(໑) ເປັນຍິງ ໔ ຄົນ (໔) ພິກສຸສຳຄັນວ່າເປັນຍິງທັງ ໔ ຄົນແລະມີຄວາມກຳຫນັດ (໓) ຍິງທັງ ໔ ໃຊ້ກາຍຈັບຕ້ອງ ລູບຄຳ ຯລຯ ຈັບ ຕ້ອງຂອງທີ່ເນື່ອງດ້ວຍກາຍຂອງພິກສຸ ພິກສຸມີຄວາມປະສົງຄ໌ຈະເສພ ພຍາຍາມດ້ວຍກາຍ ຮັບຮູ້ສັມຜັສ ຕ້ອງອາບັຕິຖຸລລັຈຈັຍ ໔ ຕົວ ຯລຯ
(໑) ເປັນຍິງແລະກະເທີຍ (໔) ພິກສຸສຳຄັນວ່າເປັນຍິງທັງ ໔ ຄົນແລະມີຄວາມກຳຫນັດ (໓) ທັງ ໔ ຄົນໃຊ້ກາຍຈັບຕ້ອງ ລູບຄຳ ຯລຯ ຈັບ ຕ້ອງຂອງທີ່ເນື່ອງດ້ວຍກາຍຂອງພິກສຸ ພິກສຸມີຄວາມປະສົງຄ໌ຈະເສພ ພຍາຍາມດ້ວຍກາຍ ຮັບຜູ້ສັມຜັສ ຕ້ອງອາບັຕິທຸກກຕກັບອາບັຕິຖຸລລັຈຈັຍ ຯລຯ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ສັງຂາທິເສສກັນຫ໌] ໔. ກາຍສັງສັຄຄສິກຂາບົທ ບົທພາຊນີຍ໌
ຍິງໃຊ້ຂອງທີ່ເນື່ອງດ້ວຍກາຍຖືກຕ້ອງກາຍຂອງພິກສຸ

(໑) ເປັນຍິງ (໔) ພິກສຸສຳຄັນວ່າເປັນຍິງແລະມີຄວາມກຳຫນັດ (໓) ຍິງໃຊ້ຂອງທີ່ເນື່ອງດ້ວຍກາຍຈັບຕ້ອງ ລູບຄຳ ຯລຯ ຈັບ ຕ້ອງກາຍຂອງພິກສຸ ພິກສຸມີຄວາມປະສົງຄ໌ຈະເສພ ພຍາຍາມດ້ວຍກາຍ ຮັບຮູ້ສັມຜັສ ຕ້ອງອາບັຕິຖຸລລັຈຈັຍ ຯລຯ
(໑) ເປັນຍິງ ໔ ຄົນ (໔) ພິກສຸສຳຄັນວ່າເປັນຍິງທັງ ໔ ຄົນແລະມີຄວາມກຳຫນັດ (໓) ຍິງທັງ ໔ ຄົນໃຊ້ຂອງທີ່ເນື່ອງດ້ວຍກາຍຈັບຕ້ອງ ລູບຄຳ ຯລຯ ຈັບ ຕ້ອງກາຍຂອງພິກສຸ ພິກສຸມີຄວາມປະສົງຄ໌ຈະເສພ ພຍາຍາມດ້ວຍກາຍ ຮັບຮູ້ສັມຜັສ ຕ້ອງອາບັຕິຖຸລລັຈຈັຍ ໔ ຕົວ ຯລຯ
(໑) ເປັນຍິງແລະກະເທີຍ (໔) ພິກສຸສຳຄັນວ່າເປັນຍິງທັງ ໔ ຄົນແລະມີຄວາມກຳຫນັດ (໓) ທັງ ໔ ໃຊ້ຂອງທີ່ເນື່ອງດ້ວຍກາຍຈັບຕ້ອງ ລູບຄຳ ຯລຯ ຈັບ ຕ້ອງກາຍຂອງພິກສຸ ພິກສຸມີຄວາມປະສົງຄ໌ຈະເສພ ພຍາຍາມດ້ວຍກາຍ ຮັບຮູ້ສັມຜັສ ຕ້ອງອາບັຕິທຸກກຕກັບອາບັຕິຖຸລລັຈຈັຍ ຯລຯ

[໔໗໗] (໑) ເປັນຍິງ (໔) ພິກສຸສຳຄັນວ່າເປັນຍິງແລະມີຄວາມກຳໜັດ (໓) ຍິງໃຊ້ຂອງທີ່ເນື່ອງດ້ວຍກາຍຈັບຕ້ອງ ລູບຄຳ ຯລຯ ຈັບ ຕ້ອງຂອງທີ່ເນື່ອງດ້ວຍກາຍຂອງພິກສຸ ພິກສຸມີຄວາມປະສົງຄ໌ຈະເສພ ພຍາຍາມດ້ວຍກາຍ ຮັບຮູ້ສັມຜັສ ຕ້ອງອາບັຕິທຸກກຕ ຯລຯ

(໑) ເປັນຍິງ ໒ ຄົນ (໔) ພິກສຸສຳຄັນວ່າເປັນຍິງທັງ ໒ ຄົນແລະມີຄວາມກຳໜັດ (໓) ຍິງທັງ ໒ ໃຊ້ຂອງທີ່ເນື່ອງດ້ວຍກາຍຈັບຕ້ອງ ລູບຄຳ ຯລຯ ຈັບ ຕ້ອງຂອງທີ່ເນື່ອງດ້ວຍກາຍຂອງພິກສຸ ພິກສຸມີຄວາມປະສົງຄ໌ຈະເສພ ພຍາຍາມດ້ວຍກາຍ ຮັບຮູ້ສັມຜັສ ຕ້ອງອາບັຕິທຸກກຕ ໒ ຕົວ ຯລຯ

(໑) ເປັນຍິງແລະກະເທີຍ (໔) ພິກສຸສຳຄັນວ່າເປັນຍິງທັງ ໒ ຄົນແລະມີຄວາມກຳໜັດ (໓) ທັງ ໒ ໃຊ້ຂອງທີ່ເນື່ອງດ້ວຍກາຍຈັບຕ້ອງ ລູບຄຳ ຯລຯ ຈັບ ຕ້ອງຂອງທີ່ເນື່ອງດ້ວຍກາຍຂອງພິກສຸ ພິກສຸມີຄວາມປະສົງຄ໌ຈະເສພ ພຍາຍາມດ້ວຍກາຍ ຮັບຮູ້ສັມຜັສຕ້ອງອາບັຕິທຸກກຕ ໒ ຕົວ ຯລຯ

### ພຣະວິນັຍປິດົກ ມຫາວິພັງຄ໌ [໔. ສັງຂາທິເສສກັນຖ໌] ໒. ກາຍສັງສັຄຄສິກຂາບົທ ບົທພາຊນີຍ໌ ຍິງໃຊ້ຂອງທີ່ໂຍນຖືກຕ້ອງກາຍຂອງພິກສຸ

(໑) ເປັນຍິງ (໔) ພິກສຸສຳຄັນວ່າເປັນຍິງແລະມີຄວາມກຳໜັດ (໓) ຍິງໃຊ້ຂອງໂຍນມາຖືກຕ້ອງກາຍຂອງພິກສຸ ພິກສຸມີຄວາມປະສົງຄ໌ຈະເສພ ພຍາຍາມດ້ວຍກາຍ ຮັບຮູ້ສັມຜັສ ຕ້ອງອາບັຕິທຸກກຕ ຯລຯ

(໑) ເປັນຍິງ ໒ ຄົນ (໔) ພິກສຸສຳຄັນວ່າເປັນຍິງທັງ ໒ ຄົນແລະມີຄວາມກຳໜັດ (໓) ຍິງທັງ ໒ ໃຊ້ຂອງໂຍນມາຖືກຕ້ອງກາຍຂອງພິກສຸ ພິກສຸມີຄວາມປະສົງຄ໌ຈະເສພພຍາຍາມດ້ວຍກາຍ ຮັບຮູ້ສັມຜັສ ຕ້ອງອາບັຕິທຸກກຕ ໒ ຕົວ ຯລຯ

(໑) ເປັນຍິງແລະກະເທີຍ (໔) ພິກສຸສຳຄັນວ່າເປັນຍິງທັງ ໒ ຄົນແລະມີຄວາມກຳໜັດ (໓) ທັງ ໒ ໃຊ້ຂອງໂຍນມາຖືກຕ້ອງກາຍຂອງພິກສຸ ພິກສຸມີຄວາມປະສົງຄ໌ຈະເສພ ພຍາຍາມດ້ວຍກາຍ ຮັບຮູ້ສັມຜັສ ຕ້ອງອາບັຕິທຸກກຕ ໒ ຕົວ ຯລຯ

### ຍິງໃຊ້ຂອງທີ່ໂຍນຖືກຕ້ອງຂອງທີ່ເນື່ອງດ້ວຍກາຍຂອງພິກສຸ

(໑) ເປັນຍິງ (໔) ພິກສຸສຳຄັນວ່າເປັນຍິງແລະມີຄວາມກຳໜັດ (໓) ຍິງໃຊ້ຂອງໂຍນມາຖືກຕ້ອງຂອງທີ່ເນື່ອງດ້ວຍກາຍຂອງພິກສຸ ພິກສຸມີຄວາມປະສົງຄ໌ຈະເສພ ພຍາຍາມດ້ວຍກາຍ ຮັບຮູ້ສັມຜັສ ຕ້ອງອາບັຕິທຸກກຕ ຯລຯ

(໑) ເປັນຍິງ ໒ ຄົນ (໔) ພິກສຸສຳຄັນວ່າເປັນຍິງທັງ ໒ ຄົນແລະມີຄວາມກຳໜັດ (໓) ທັງ ໒

ເອົາຂອງໂຍນມາຖືກຕ້ອງຂອງທີ່ເນື່ອງດ້ວຍກາຍຂອງພິກສຸ ພິກສຸມີຄວາມປະສົງຄ໌ຈະເສພ ພຍາຍາມດ້ວຍກາຍ ຮັບຮູ້ສັມຜັສ ຕ້ອງອາບັຕິທຸກກຕ ໔ ຕົວ ຯລຯ

(໑) ເປັນຍິງແລະກະເທີຍ (໔) ພິກສຸສຳຄັນວ່າເປັນຍິງທັງ ໔ ຄົນແລະມີຄວາມກຳຫນັດ (໓) ທັງ ໔ ເອົາຂອງໂຍນມາຖືກຕ້ອງຂອງທີ່ເນື່ອງດ້ວຍກາຍຂອງພິກສຸ ພິກສຸມີຄວາມປະສົງຄ໌ຈະເສພ ພຍາຍາມດ້ວຍກາຍ ຮັບຮູ້ສັມຜັສ ຕ້ອງອາບັຕິທຸກກຕ ໔ ຕົວ ຯລຯ

ຍິງໃຊ້ຂອງທີ່ໂຍນຖືກຕ້ອງຂອງທີ່ໂຍນຂອງພິກສຸ

(໑) ເປັນຍິງ (໔) ພິກສຸສຳຄັນວ່າເປັນຍິງແລະມີຄວາມກຳຫນັດ (໓) ຍິງໃຊ້ຂອງໂຍນມາຖືກຕ້ອງຂອງທີ່ພິກສຸໂຍນໄປ ພິກສຸມີຄວາມປະສົງຄ໌ຈະເສພ ພຍາຍາມດ້ວຍກາຍແຕ່ບໍ່ຮັບຮູ້ສັມຜັສ ຕ້ອງອາບັຕິທຸກກຕ ຯລຯ

(໑) ເປັນຍິງ ໔ ຄົນ (໔) ພິກສຸສຳຄັນວ່າເປັນຍິງທັງ ໔ ຄົນແລະມີຄວາມກຳຫນັດ (໓) ທັງ ໔ ໃຊ້ຂອງໂຍນມາຖືກຕ້ອງຂອງທີ່ພິກສຸໂຍນໄປ ພິກສຸມີຄວາມປະສົງຄ໌ຈະເສພ ພຍາຍາມດ້ວຍກາຍ ແຕ່ບໍ່ຮັບຮູ້ສັມຜັສ ຕ້ອງອາບັຕິທຸກກຕ ໔ ຕົວ ຯລຯ

(໑) ເປັນຍິງແລະກະເທີຍ (໔) ພິກສຸສຳຄັນວ່າເປັນຍິງທັງ ໔ ຄົນແລະມີຄວາມກຳຫນັດ (໓) ທັງ ໔ ໃຊ້ຂອງໂຍນມາຖືກຕ້ອງຂອງທີ່ພິກສຸໂຍນໄປ ພິກສຸມີຄວາມປະສົງຄ໌ຈະເສພ ພຍາຍາມດ້ວຍກາຍ ແຕ່ບໍ່ຮັບຮູ້ສັມຜັສ ຕ້ອງອາບັຕິທຸກກຕ ໔ ຕົວ ຯລຯ

ອິຕຖີເປຍຍາລ ຈົບ

[໔໗໙] ພິກສຸມີຄວາມປະສົງຄ໌ຈະເສພ ພຍາຍາມດ້ວຍກາຍ ຮັບຮູ້ສັມຜັສ ຕ້ອງອາບັຕິສັງຂາທິເສສ
ພິກສຸມີຄວາມປະສົງຄ໌ຈະເສພ ພຍາຍາມດ້ວຍກາຍ ແຕ່ບໍ່ຮັບຮູ້ສັມຜັສ ຕ້ອງອາບັຕິທຸກກຕ
ພິກສຸມີຄວາມປະສົງຄ໌ຈະເສພ ແຕ່ບໍ່ພຍາຍາມດ້ວຍກາຍ ຮັບຮູ້ສັມຜັສ ບໍ່ຕ້ອງອາບັຕິພິກສຸມີຄວາມປະສົງຄ໌ຈະເສພ ບໍ່ພຍາຍາມດ້ວຍກາຍ ແລະບໍ່ຮັບຮູ້ສັມຜັສ ບໍ່ຕ້ອງອາບັຕິ
ພິກສຸມີຄວາມປະສົງຄ໌ຈະໃຫ້ພົ້ນ ພຍາຍາມດ້ວຍກາຍ ຮັບຮູ້ສັມຜັສ ບໍ່ຕ້ອງອາບັຕິ
ພິກສຸມີຄວາມປະສົງຄ໌ຈະໃຫ້ພົ້ນ ພຍາຍາມດ້ວຍກາຍ ແຕ່ບໍ່ຮັບຮູ້ສັມຜັສ ບໍ່ຕ້ອງອາບັຕິ

ພິກສຸມີຄວາມປະສົງຄ໌ຈະໃຫ້ພົ້ນ ແຕ່ບໍ່ພຍາຍາມດ້ວຍກາຍ ຮັບຮູ້ສັມຜັສ ບໍ່ຕ້ອງອາບັຕິ
ພິກສຸມີຄວາມປະສົງຄ໌ຈະໃຫ້ພົ້ນ ບໍ່ພຍາຍາມດ້ວຍກາຍ ແລະບໍ່ຮັບຮູ້ສັມຜັສ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ ບໍ່ຕ້ອງອາບັຕິ ຄື

[໔໗໐] ໑. ພິກສຸບໍ່ຈົງໃຈ

໒. ພິກສຸຖືກຕ້ອງເພາະບໍ່ມີສຕິ

໓. ພິກສຸບໍ່ຮູ້

໔. ພິກສຸບໍ່ຍິນດີ

໕. ພິກສຸວິກົລຈິຕ

໖. ພິກສຸມີຈິຕຟັ່ນຟ່ວນ

໗. ພິກສຸກະວົນກະວາຍເພາະເວທນາ

໘. ພິກສຸຕົ້ນບັນຍັຕ

ຄາຖາຣວມວິນີຕວັຕຖຸ
ເຣື່ອງທີ່ຊົງວິນິຈສັຍແລ້ວ

ເຣື້ອງມາຣດາ ໑ ເຣື້ອງ □ເຣື້ອງທິດາ ໑ ເຣື້ອງ □ເຣື້ອງນ້ອງສາວ ໑ ເຣື້ອງ □ເຣື້ອງອດີຕພັຣຍາ ໑ ເຣື້ອງ □ເຣື້ອງນາງຍັກສ໌ ໑ ເຣື້ອງ □ເຣື້ອງກະເທີຍ ໑ ເຣື້ອງ □ເຣື້ອງຍິງນອນຫລັບ ໑ ເຣື້ອງ □ເຣື້ອງຍິງທີ່ຕາຍແລ້ວ ໑ ເຣື້ອງ □ເຣື້ອງສັຕວ໌ເດັຽຣະສານໂຕແມ່ ໑ ເຣື້ອງ □ເຣື້ອງຕຸ໊ກຕາໄມ້ ໑ ເຣື້ອງ □ເຣື້ອງຍິງຮ່ວມກັນສຸດ ໑ ເຣື້ອງ □ເຣື້ອງຂົວ ໑ ເຣື້ອງ □ເຣື້ອງຫົນທາງ ໑ ເຣື້ອງ □ເຣື້ອງຕົ້ນໄມ້ ໑ ເຣື້ອງ □ເຣື້ອງເຮືອ ໑ ເຣື້ອງ □ເຣື້ອງເຊືອກ ໑ ເຣື້ອງ □ເຣື້ອງທ່ອນໄມ້ ໑ ເຣື້ອງ □ເຣື້ອງໃຊ້ບາຕຣດັນ ໑ ເຣື້ອງ □ເຣື້ອງໄຫວ້ ໑ ເຣື້ອງ □ເຣື້ອງພຍາຍາມແຕ່ບໍ່ໄດ້ຈັບຕ້ອງ ໑ ເຣື້ອງ

ວິນີຕວັຕຖຸ
ເຣື້ອງມາຣດາ ໑ ເຣື້ອງ

[໔໗໑] ສມັຍນັ້ນ ພິກສຸຮູບນຶ່ງຈັບຕ້ອງມາຣດາດ້ວຍຄວາມຮັກຖານແມ່ລູກ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິສັງຂາທິເສສຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄເຈົ້າໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິສັງຂາທິເສສ ແຕ່ຕ້ອງອາບັຕິທຸກກຕ" (ເຣື້ອງທີ ໑)

ເຣື້ອງທິດາ ໑ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງຈັບຕ້ອງທິດາດ້ວຍຄວາມຮັກຖານພໍ່ລູກ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິສັງຂາທິເສສຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິສັງຂາທິເສສ ແຕ່ຕ້ອງອາບັຕິທຸກກຕ" (ເຣື້ອງທີ ໒)

ເຣື້ອງນ້ອງສາວ ໑ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງຈັບຕ້ອງນ້ອງສາວດ້ວຍຄວາມຮັກຖານນ້ອງສາວ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິສັງຂາທິເສສຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິສັງຂາທິເສສ ແຕ່ຕ້ອງອາບັຕິທຸກກຕ" (ເຣື້ອງທີ ໓)

ເຣື້ອງອດີຕພັຣຍາ ໑ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງຖືກຕ້ອງກາຍກັບອດີຕພັຣຍາ ທ່ານເກີດຄວາມກັງວົລໃຈວ່າເຮົາຕ້ອງອາບັຕິສັງຂາທິເສສ ຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິສັງຂາທິເສສ" (ເຣື້ອງທີ ໔)

ເຣື້ອງນາງຍັກສ໌ ໑ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງຖືກຕ້ອງກາຍກັບນາງຍັກສ໌ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິສັງຂາທິເສສຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິສັງຂາທິເສສ ແຕ່ຕ້ອງອາບັຕິຖຸລລັຈຈັຍ" (ເຣື້ອງທີ ໕)

ເຣື້ອງກະເທີຍ ໑ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງຖືກຕ້ອງກາຍກັບກະເທີຍ ທ່ານເກີດຄວາມກັງວົລໃຈວ່າເຮົາຕ້ອງອາບັຕິສັງຂາທິເສສ ຫລືບໍ່ ຈຶ່ງນຳເຣື່ງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິສັງຂາທິເສສ ແຕ່ຕ້ອງອາບັຕິຖຸລລັຈຈັຍ" (ເຣື່ອງທີ ໖)

## ເຣື້ອງຍິງນອນຫລັບ ໑ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງຖືກຕ້ອງກາຍກັບຍິງນອນຫລັບ ທ່ານເກີດຄວາມກັງວົລໃຈວ່າເຮົາຕ້ອງອາບັຕິສັງຂາທິ ເສສຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິສັງຂາທິເສສ" (ເຣື້ອງທີ ໗)

## ເຣື້ອງຍິງທີ່ຕາຍແລ້ວ ໑ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງຖືກຕ້ອງກາຍກັບຍິງທີ່ຕາຍແລ້ວ ທ່ານເກີດຄວາມກັງວົລໃຈວ່າເຮົາຕ້ອງອາບັຕິສັງຂາທິ ເສສຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິສັງຂາທິເສສ ແຕ່ຕ້ອງອາບັຕິຖຸລລັຈຈັຍ" (ເຣື້ອງທີ ໘)

## ເຣື້ອງສັຕວ໌ເດັຽຣະສານໂຕແມ່ ໑ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງຖືກຕ້ອງກາຍກັບສັຕວ໌ເດັຽຣະສານໂຕແມ່ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິສັງຂາທິເສສຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິສັງຂາທິເສສ ແຕ່ຕ້ອງອາບັຕິທຸກກຕ" (ເຣື້ອງທີ ໙)

## ເຣື້ອງຕຸ໊ກຕາໄມ້ ໑ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງຖືກຕ້ອງກາຍກັບຕຸ໊ກຕາໄມ້ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິສັງຂາທິ ເສສຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິສັງຂາທິເສສ ແຕ່ຕ້ອງອາບັຕິທຸກກຕ" (ເຣື້ອງທີ ໑໐)

## ເຣື້ອງຍິງຮ່ວມກັນສຸດ ໑ ເຣື້ອງ

[໔໗໔] ສມັຍນັ້ນ ຍິງຈຳນວນຫລາຍຈັບແຂນຕໍ່ໆກັນໂອບພິກສຸຮູບນຶ່ງພາໄປ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິສັງຂາທິເສສຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ທ່ານຍິນດີຫລື" "ບໍ່ຍິນດີ ພຣະພຸທທເຈົ້າຂ້າ" "ພິກສຸ ທ່ານບໍ່ຍິນດີ ບໍ່ຕ້ອງອາບັຕິ" (ເຣື້ອງທີ ໑໑)

## ເຣື້ອງຂົວ ໑ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງມີຄວາມກຳຫນັດ ຈຶ່ງສັ່ນຂົວໄມ້ທີ່ຍິງຍ່າງຂຶ້ນໄປ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິສັງຂາທິເສສຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິສັງຂາທິເສສ ແຕ່ຕ້ອງອາບັຕິທຸກກຕ" (ເຣື້ອງທີ ໑໔)

## ເຣື້ອງຫົນທາງ ໑ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງພົບຍິງຍ່າງສວນທາງມາ ມີຄວາມກຳຫນັດຈຶ່ງຕຳບ່າໄຫລ່ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິສັງຂາທິເສສຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິສັງຂາທິເສສ" (ເຣື້ອງທີ ໑໓)

## ເຣື້ອງຕົ້ນໄມ້ ໑ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງມີຄວາມກຳຫນັດ ຈຶ່ງສັ່ນຕົ້ນໄມ້ທີ່ຍິງຂຶ້ນໄປ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິສັງຂາທິເສສຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິສັງຂາທິເສສ ແຕ່ຕ້ອງອາບັຕິທຸກກຕ" (ເຣື້ອງທີ ໑໔)

## ເຣື້ອງເຮືອ ໑ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງມີຄວາມກຳຫນັດ ຈຶ່ງສັ່ນເຮືອທີ່ຍິງນັ່ງ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິສັງຂາທິເສສຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິສັງຂາທິເສສ ແຕ່ຕ້ອງອາບັຕິທຸກກຕ" (ເຣື້ອງທີ ໑໕)

## ເຣື້ອງເຊືອກ ໑ ເຣື້ອງ

ສມັຍນັ້ນ ພິກສຸຮູບນຶ່ງມີຄວາມກຳຫນັດ ຈຶ່ງດຶງເຊືອກທີ່ຍິງຈັບໄວ້ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິສັງຂາທິເສສຫລືບໍ່ ຈຶ່ງນຳເລື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິສັງຂາທິເສສ ແຕ່ຕ້ອງອາບັຕິຖຸລລັຈຈັຍ" (ເລື້ອງທີ ໑໕)

## ເລື້ອງທ່ອນໄມ້ ໑ ເລື້ອງ

ສມັຍນັ້ນ ພິກສຸຮູບນຶ່ງມີຄວາມກຳຫນັດ ຈຶ່ງສຸດທ່ອນໄມ້ທີ່ຍິງຖືໄວ້ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິສັງຂາທິເສສຫລືບໍ່ ຈຶ່ງນຳເລື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິສັງຂາທິເສສ ແຕ່ຕ້ອງອາບັຕິຖຸລລັຈຈັຍ" (ເລື້ອງທີ ໑໗)

## ເລື້ອງໃຊ້ບາຕຣດັນ ໑ ເລື້ອງ

ສມັຍນັ້ນ ພິກສຸຮູບນຶ່ງມີຄວາມກຳຫນັດ ໃຊ້ບາຕຣດັນຍິງ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິສັງຂາທິເສສຫລືບໍ່ ຈຶ່ງນຳເລື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິສັງຂາທິເສສ ແຕ່ຕ້ອງອາບັຕິຖຸລລັຈຈັຍ" (ເລື້ອງທີ ໑໘)

## ເລື້ອງໄຫວ້ ໑ ເລື້ອງ

ສມັຍນັ້ນ ພິກສຸຮູບນຶ່ງມີຄວາມກຳຫນັດ ຍົກຕີນຖືກຍິງຜູ້ກຳລັງໄຫວ້ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິສັງຂາທິເສສຫລືບໍ່ ຈຶ່ງນຳເລື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິສັງຂາທິເສສ" (ເລື້ອງທີ ໑໙)

## ເລື້ອງພຍາຍາມແຕ່ບໍ່ໄດ້ຈັບຕ້ອງ ໑ ເລື້ອງ

ສມັຍນັ້ນ ພິກສຸຮູບນຶ່ງພຍາຍາມຈະຈັບຍິງແຕ່ບໍ່ໄດ້ຖືກຕົວ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິສັງຂາທິເສສຫລືບໍ່ ຈຶ່ງນຳເລື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິສັງຂາທິເສສ ແຕ່ຕ້ອງອາບັຕິທຸກກົຕ" (ເລື້ອງທີ ໒໐)

ກາຍສັງສັຄຄສິກຂາບົທທີ ໒ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ສັງຊາທິເສສກັນຫ໌] ໓. ທຸດຖຸລລອາຈາສິກຂາບົທ ນິທານວັຕຖຸ

ໜ. ທຸດຖຸລລອາຈາສິກຂາບົທ

ວ່າດ້ວຍການເວົ້າກັງວອນຍິງ

ເຣື່ອງພຣະອຸທາຍີ

[໔໗໓] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂດກຸງສາວັຕຖີ ຄັ້ງນັ້ນ ທ່ານພຣະອຸທາຍີຢູ່ໃນປ່າ ວິຫາຣຂອງທ່ານສວຍງາມ ໜ້າເບິ່ງ ໜ້າຊົມ ຍິງຈຳນວນຫລາຍພາກັນໄປທີ່ວັດເພື່ອຊົມວິຫາຣ ພາກັນເຂົ້າໄປຫາທ່ານພຣະອຸທາຍີເຖິງທີ່ຢູ່ ຄັນເຂົ້າໄປຫາແລ້ວ ກ່າວວ່າ “ພວກຂະນ້ອຍຕ້ອງການຊົມວິຫາຣຂອງພຣະຄຸນເຈົ້າ ຂະນ້ອຍ” ທ່ານພຣະອຸທາຍີພາຍິງເຫລົ່ານັ້ນຊົມວິຫາຣ ເວົ້າຍ້ອງແດ່ ເວົ້າຕິແດ່ ຂໍແດ່ ອ້ອນວອນແດ່ ຖາມແດ່ ຖາມຊ້ຳແດ່ ບອກແດ່ ສອນແດ່ ດ່າແດ່ ພາດພິງທວາຣໜັກ ທວາຣເບົາຂອງຍິງເຫລົ່ານັ້ນ ພວກຍິງທີ່ບໍ່ຢ້ານບາປ ໃຈເຖິງ ບໍ່ມີຢາງອາຍ ຕ່າງກໍຍິ້ມຍິວະແດ່ ເວົ້າຍິວະແດ່ ກະຊິກກະຊີ້ແດ່ ເວົ້າຫຍອກກັບທ່ານພຣະອຸທາຍີແດ່ ສ່ວນພວກຍິງທີ່ມີຄວາມລະອາຍໃຈກໍລຽງອອກໄປແລ້ວຟ້ອງພິກສຸທັງຫລາຍວ່າ “ທ່ານຂະນ້ອຍ ຄຳເຊັ່ນນີ້ບໍ່ເໝາະ ບໍ່ຄວຣ ສາມີເວົ້າເຊັ່ນນີ້ພວກເຮົາກໍຍັງບໍ່ຊອບ ນີ້ພຣະຄຸນເຈົ້າອຸທາຍີມາເວົ້າໄດ້ຢ່າງໃດ” ບັນດາພິກສຸຜູ້ມັກນ້ອຍສັນໂດສ ມີຄວາມລະອາຍ ມີຄວາມຣະມັດຣະວັງ ໃຝ່ການສຶກສາ ຈຶ່ງພາກັນຕຳໜິ ປະນາມ ໂພນທະນາວ່າ “ຈັ່ງໃດທ່ານພຣະອຸທາຍີຈຶ່ງເວົ້າກັງວອນມາຕຸຄາມ ດ້ວຍວາຈາຊົ່ວຫຍາບລະ” ຄັນພິກສຸເຫລົ່ານັ້ນຕຳໜິທ່ານພຣະອຸທາຍີໂດຍປະການຕ່າງໆ

ແລ້ວຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ຄັ້ງນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື່ອງນີ້ເປັນຕົ້ນເຫດຸ ຊົງສອບຖາມທ່ານພຣະອຸທາຍີວ່າ “ອຸທາຍີ ຊາບວ່າ ທ່ານເວົ້າກັງວອນມາຕຸຄາມດ້ວຍວາຈາຊົ່ວຫຍາບແມ່ນແທ້ບໍ” ທ່ານທູລຮັບວ່າ “ແມ່ນແທ້ພຣະພຸທທເຈົ້າຂ້າ” ພຣະຜູ້ມີພຣະພາຄຊົງຕຳໜິວ່າ “ໂມຂບຸຣຸສ ການກະທຳຢ່າງນີ້ບໍ່ສົມຄວຣ ບໍ່ຄ້ອຍຕາມ ບໍ່ເໝາະສົມ ບໍ່ແມ່ນກິຈຂອງສມນະ ໃຊ້ບໍ່ໄດ້ ບໍ່ຄວຣທຳ ຈັ່ງໃດທ່ານຈຶ່ງເວົ້າກັງວອນມາຕຸຄາມດ້ວຍວາຈາຊົ່ວຫຍາບລະ ໂມຂບຸຣຸສ ເຮົາສະແດງທັມໂດຍປະການຕ່າງໆ ເພື່ອ

ຄາຍຄວາມກຳຫນັດ ບໍ່ແມ່ນເພື່ອຄວາມກຳຫນັດ ຯລຯ ເຮົາບອກການຣະງັບຄວາມກັດກຸ້ມເພາະການ ໄວ້ໂດຍປະການຕ່າງໆ ບໍ່ແມ່ນບໍ ໂມຊບຸຣຸສ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ແລ້ວ ຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

## ພຣະບັນຍັຕ

[໔໗໔] ກໍພິກສຸໃດຖືກຣາຄະຄອບງຳແລ້ວ ມີຈິຕຄອນແຄນ ເວົ້າກັ້ງອມາຕຸຄາມດ້ວຍອາຈາຊົ່ວຫຍາບ ພາດພິງເມຖຸນ ເຫມືອນຊາຍຫນຸ່ມເວົ້າກັ້ງອຍິງສາວ ເປັນສັງຂາທິເສສ

## ເຣື້ອງພຣະອຸທາຍີ ຈົບ

## ສິກຂາບົທວິພັງຄ໌

[໔໗໕] ຄຳວ່າ ກໍ...ໃດ ຄືຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ...ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ທີ່ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ຖືກຣາຄະຄອບງຳແລ້ວ ຄື ມີຄວາມຍິນດີ ເພັ່ງເລັງ ມີຈິຕຮັກໃຄ່

ຄຳວ່າ ຄອນແຄນ ຄວາມວ່າ ຈິຕກຳຫນັດແລ້ວຊື່ວ່າຄອນແຄນແດ່ ຈິຕໂກດແລ້ວ ຊື່ວ່າຄອນແຄນແດ່ ຈິຕຫລົງແລ້ວຊື່ວ່າຄອນແຄນແດ່ ແຕ່ຈິຕກຳຫນັດແລ້ວ ພຣະຜູ້ມີພຣະພາຄຊົງປະສົງຄ໌ວ່າ ຄອນແຄນ ໃນຄວາມ ຫມາຍນີ້

ທີ່ຊື່ວ່າ ມາຕຸຄາມ ໄດ້ແກ່ ຍິງມນຸສຍ໌ ບໍ່ແມ່ນນາງຍັກສ໌ ບໍ່ແມ່ນນາງເຜດ ບໍ່ແມ່ນສັຕວ໌ເດັຽຣະສານໂຕແມ່ ແຕ່ເປັນຍິງທີ່ຮູ້ດຽງສາ ສາມາດຮັບຮູ້ຖ້ອຍຄຳສຸພາສິຕ ທຸພພາສິຕ ຄຳຫຍາບແລະຄຳສຸພາພ

ອາຈາທີ່ຊື່ວ່າ ຊົ່ວຫຍາບ ໄດ້ແກ່ ຖ້ອຍຄຳທີ່ພາດພິງເມຖຸນທັມທາງທວານຫນັກທວານເບົາ

ຄຳວ່າ ເວົ້າກັ້ງອ ນີ້ ທ່ານຮຽກຄວາມປະພຶດລ່ວງເກີນ

ຄຳວ່າ ເຫມືອນຊາຍຫນຸ່ມເວົ້າກັ້ງອຍິງສາວ ໄດ້ແກ່ ຫນຸ່ມເວົ້າກັ້ງອສາວ ຊາຍວັຍຣຸ່ນເວົ້າກັ້ງອຍິງວັຍຣຸ່ນ ຄື ຊາຍຜູ້ບໍຣິໂພຄການເວົ້າກັ້ງອຍິງຜູ້ບໍຣິໂພຄການ

ຄຳວ່າ ພາດພິງເມຖຸນ ໄດ້ແກ່ ຖ້ອຍຄຳກ່ຽວກັບເມຖຸນທັມ

ຄຳວ່າ ເປັນສັງຄາທິເສສ ຄວາມວ່າ ສຳລັບອາບັດນີ້ ສົງຄ໌ເທົ່ານັ້ນໃຫ້ປຣິວາສ ຯລຯ ເພາະເຫຕຸນັ້ນ ພຣະຜູ້ມີພຣະພາຄຈຶ່ງຕຣັສວ່າ "ເປັນສັງຄາທິເສສ"

## ບທພາຊນີຍ໌

## ມາຕິກາ

ພິກສຸເວົ້າຊົມແດ່ ເວົ້າຕິແດ່ ຂໍແດ່ ອ້ອນວອນແດ່ ຖາມແດ່ ຖາມຊ້ຳແດ່ ບອກແດ່ ສອນແດ່ ດ່າແດ່ ພາດພິງທວາຣທັງສອງ

ທີ່ຊື່ວ່າ ເວົ້າຊົມ ຄື ເວົ້າຊົມເຊີຍ ພັນນາ ເວົ້າສັຣເສີນທວາຣທັງສອງ

ທີ່ຊື່ວ່າ ເວົ້າຕິ ຄື ເວົ້າຂົ່ມ ເວົ້າສຽດສີ ເວົ້າຕິຕຽນທວາຣທັງສອງ

ທີ່ຊື່ວ່າ ຂໍ ຄື ເວົ້າວ່າ "ຈົ່ງໃຫ້ແກ່ເຮົາ ຄວຣໃຫ້ແກ່ເຮົາ"

ທີ່ຊື່ວ່າ ອ້ອນວອນ ຄື ເວົ້າວ່າ "ເມື່ອໃດມາຣດາຂອງທ່ານຈັກເຫລື້ອມໃສ ເມື່ອໃດບິດາຂອງທ່ານຈັກເຫລື້ອມໃສ ເມື່ອໃດເທວດາຂອງທ່ານຈັກເຫລື້ອມໃສ ເມື່ອໃດທ່ານຈະມີຂະນະດີ ມີລະຍະດີ ມີຄູ່ດີ ເມື່ອໃດເຮົາຈະໄດ້ເສພເມຖຸນທັມກັບທ່ານ"

ທີ່ຊື່ວ່າ ຖາມ ຄື ຖາມວ່າ "ທ່ານໃຫ້ແກ່ສາມີຢ່າງໃດຫລືໃຫ້ແກ່ຊາຍຊູ້ຢ່າງໃດ"

ທີ່ຊື່ວ່າ ຖາມຊ້ຳ ຄື ສອບຖາມວ່າ "ຊາບວ່າ ທ່ານໃຫ້ແກ່ສາມີຢ່າງນີ້ ໃຫ້ແກ່ຊາຍຊູ້ຢ່າງນີ້ຫລື"

ທີ່ຊື່ວ່າ ບອກ ຄື ພໍຖືກຖາມຈຶ່ງບອກວ່າ "ທ່ານຈົ່ງໃຫ້ຢ່າງນີ້ ເມື່ອໃຫ້ຢ່າງນີ້ຈະເປັນທີ່ຮັກໃຄ່ພໍໃຈຂອງສາມີ"

ທີ່ຊື່ວ່າ ສອນ ຄື ເຂົາບໍ່ຖາມກໍສອນວ່າ "ທ່ານຈົ່ງໃຫ້ຢ່າງນີ້ ເມື່ອໃຫ້ຢ່າງນີ້ ຈະເປັນທີ່ຮັກໃຄ່ພໍໃຈຂອງສາມີ"

ທີ່ຊື່ວ່າ ດ່າ ຄື ດ່າວ່າ "ທ່ານບໍ່ມີເຄື່ອງຫມາຍເພສ ທ່ານພຽງແຕ່ວ່າມີເຄື່ອງຫມາຍເພສ ທ່ານບໍ່ມີປະຈຳເດືອນ ທ່ານມີປະຈຳເດືອນບໍ່ຢຸດ ທ່ານໃຊ້ຜ້າຊັບສເມີ ທ່ານເປັນຄົນໄຫລຊຶມ ທ່ານມີເດືອຍ ທ່ານເປັນກະເທີຍຍິງ ທ່ານມີລັກສນະຄ້າຍຊາຍ ທ່ານມີທວາຣຫນັກທວາຣເບົາຕິດກັນ ທ່ານມີສອງເພສ"

## ຍິງ

[໔໗໖] (໑) ເປັນຍິງ (໒) ພິກສຸສຳຄັນວ່າເປັນຍິງແລະມີຄວາມກຳຫນັດ (໓) ພິກສຸເວົ້າຊົມແດ່ ເວົ້າຕິແດ່ ຂໍແດ່ ອ້ອນວອນແດ່ ຖາມແດ່ ຖາມຊ້ຳແດ່ ບອກແດ່ສອນແດ່ ດ່າແດ່ ພາດພິງທວາຣ

ຫນັກຫວາຣເບົາຂອງຍິງ ຕ້ອງອາບັຕິສັງຄາທິເສສ
(໑) ເປັນຍິງ (໔) ພິກສຸບໍ່ແນ່ໃຈຍິງວ່າເປັນຍິງ ຯລຯ ສຳຄັນວ່າເປັນກະເທີຍ ຯລຯ ສຳຄັນວ່າເປັນຊາຍ ຯລຯ ສຳຄັນວ່າເປັນສັຕວ໌ເດັຽຣະສານແລະມີຄວາມກຳຫນັດ (໓) ພິກສຸເວົ້າຊົມແດ່ ເວົ້າຕິແດ່ ຯລຯ ດ່າແດ່ ພາດພິງຫວາຣຫນັກຫວາຣເບົາຂອງຍິງ ຕ້ອງອາບັຕິຖຸລລັຈຈັຍ

## ກະເທີຍ

(໑) ເປັນກະເທີຍ (໔) ພິກສຸສຳຄັນວ່າເປັນກະເທີຍແລະມີຄວາມກຳຫນັດ (໓) ພິກສຸເວົ້າຊົມແດ່ ເວົ້າຕິແດ່ ຯລຯ ດ່າແດ່ ພາດພິງຫວາຣຫນັກຫວາຣເບົາຂອງກະເທີຍ ຕ້ອງອາບັຕິຖຸລລັຈຈັຍ
(໑) ເປັນກະເທີຍ (໔) ພິກສຸບໍ່ແນ່ໃຈວ່າເປັນກະເທີຍ ຯລຯ ສຳຄັນວ່າເປັນຊາຍ ຯລຯ ສຳຄັນວ່າເປັນສັຕວ໌ເດັຽຣະສານ ຯລຯ ສຳຄັນວ່າເປັນຍິງແລະມີຄວາມກຳຫນັດ (໓) ພິກສຸເວົ້າຊົມແດ່ ເວົ້າຕິແດ່ ຯລຯ ດ່າແດ່ ພາດພິງຫວາຣຫນັກຫວາຣເບົາຂອງກະເທີຍ ຕ້ອງອາບັຕິທຸກກຕ

## ຊາຍ

(໑) ເປັນຊາຍ (໔) ພິກສຸສຳຄັນວ່າເປັນຊາຍ ຯລຯ ບໍ່ແນ່ໃຈວ່າເປັນຊາຍ ຯລຯ ສຳຄັນວ່າເປັນສັຕວ໌ເດັຽຣະສານ ຯລຯ ສຳຄັນວ່າເປັນຍິງ ຯລຯ ສຳຄັນວ່າເປັນກະເທີຍແລະມີຄວາມກຳຫນັດ (໓) ພິກສຸເວົ້າຊົມແດ່ ເວົ້າຕິແດ່ ຯລຯ ດ່າແດ່ ພາດພິງຫວາຣຫນັກຫວາຣເບົາຂອງຊາຍ ຕ້ອງອາບັຕິທຸກກຕ

## ສັຕວ໌ເດັຽຣະສານ

(໑) ເປັນສັຕວ໌ເດັຽຣະສານ (໔) ພິກສຸສຳຄັນວ່າເປັນສັຕວ໌ເດັຽຣະສານ ຯລຯ ບໍ່ແນ່ໃຈວ່າເປັນສັຕວ໌ເດັຽຣະສານ ຯລຯ ສຳຄັນວ່າເປັນຍິງ ຯລຯ ສຳຄັນວ່າເປັນກະເທີຍ ຯລຯ ສຳຄັນວ່າເປັນຊາຍແລະມີຄວາມກຳຫນັດ (໓) ພິກສຸເວົ້າຊົມແດ່ ເວົ້າຕິແດ່ ຯລຯ ດ່າແດ່ ພາດພິງຫວາຣຫນັກຫວາຣເບົາຂອງສັຕວ໌ເດັຽຣະສານ ຕ້ອງອາບັຕິທຸກກຕ

## ຍິງ ໔ ຄົນ

(໑) ເປັນຍິງ ໔ ຄົນ (໔) ພິກສຸສຳຄັນວ່າເປັນຍິງທັງ ໔ ຄົນແລະມີຄວາມກຳໜັດ (໓) ພິກສຸ ເວົ້າຊົມແດ່ ເວົ້າຕິແດ່ ຯລຯ ດ່າແດ່ ພາດພິງທວາຣໜັກທວາຣເບົາຂອງຍິງທັງ ໔ ຄົນ ຕ້ອງ ອາບັດສັງຄາທິເສສ ໔ ຕົວ

(໑) ເປັນຍິງ ໔ ຄົນ (໔) ພິກສຸບໍ່ແນ່ໃຈວ່າເປັນຍິງທັງ ໔ ຄົນ ຯລຯ ສຳຄັນວ່າເປັນກະເທີຍ ຯລຯ ສຳຄັນວ່າເປັນຊາຍ ຯລຯ ສຳຄັນວ່າເປັນສັຕວ໌ເດັຽຣະສານແລະມີຄວາມກຳໜັດ (໓) ພິກສຸ ເວົ້າຊົມແດ່ ເວົ້າຕິແດ່ ຯລຯ ດ່າແດ່ ພາດພິງທວາຣໜັກທວາຣເບົາຂອງຍິງທັງ ໔ ຄົນ ຕ້ອງ ອາບັດຖຸລລັຈຈັຍ ໔ ຕົວ

## ກະເທີຍ ໔ ຄົນ

(໑) ເປັນກະເທີຍ ໔ ຄົນ (໔) ພິກສຸສຳຄັນກໍວ່າເປັນກະເທີຍທັງ ໔ ຄົນແລະມີຄວາມກຳໜັດ (໓) ພິກສຸເວົ້າຊົມແດ່ ເວົ້າຕິແດ່ ຯລຯ ດ່າແດ່ ພາດພິງທວາຣໜັກທວາຣເບົາຂອງກະເທີຍທັງ ໔ ຄົນ ຕ້ອງອາບັດຖຸລລັຈຈັຍ ໔ ຕົວ

(໑) ເປັນກະເທີຍ ໔ ຄົນ (໔) ພິກສຸບໍ່ແນ່ໃຈວ່າເປັນກະເທີຍທັງ ໔ ຄົນ ຯລຯ ສຳຄັນວ່າເປັນ ຊາຍ ຯລຯ ສຳຄັນວ່າເປັນສັຕວ໌ເດັຽຣະສານ ຯລຯ ສຳຄັນວ່າເປັນຍິງແລະມີຄວາມກຳໜັດ (໓) ພິກສຸເວົ້າຊົມແດ່ ເວົ້າຕິແດ່ ຯລຯ ດ່າແດ່ ພາດພິງທວາຣໜັກທວາຣເບົາຂອງກະເທີຍທັງ ໔ ຄົນ ຕ້ອງອາບັດທຸກກຕ ໔ ຕົວ

## ຊາຍ ໔ ຄົນ

(໑) ເປັນຊາຍ ໔ ຄົນ (໔) ພິກສຸສຳຄັນວ່າເປັນຊາຍທັງ ໔ ຄົນ ຯລຯ ບໍ່ແນ່ໃຈວ່າເປັນຊາຍ ຯລຯ ສຳຄັນວ່າເປັນສັຕວ໌ເດັຽຣະສານ ຯລຯ ສຳຄັນວ່າເປັນຍິງ ຯລຯ ສຳຄັນວ່າເປັນກະເທີຍແລະມີຄວາມ ກຳໜັດ (໓) ພິກສຸເວົ້າຊົມແດ່ ເວົ້າຕິແດ່ ຯລຯ ດ່າແດ່ ພາດພິງທວາຣໜັກທວາຣເບົາຂອງຊາຍ ທັງ ໔ ຄົນ ຕ້ອງອາບັດທຸກກຕ ໔ ຕົວ

## ສັຕວ໌ເດັຽຣະສານ ໔ ຕົວ

(໑) ເປັນສັຕວ໌ເດັຽຣະສານ ໔ ຕົວ (໔) ພິກສຸສຳຄັນວ່າເປັນສັຕວ໌ເດັຽຣະສານທັງ ໔ ຕົວ ຯລຯ ບໍ່ ແນ່ໃຈວ່າເປັນສັຕວ໌ເດັຽຣະສານ ຯລຯ ສຳຄັນວ່າເປັນຍິງ ຯລຯ ສຳຄັນວ່າເປັນກະເທີຍ ຯລຯ ສຳ

ຄັນວ່າເປັນຊາຍແລະມີຄວາມກຳຫນັດ (໓) ພິກສຸເວົ້າຊົມແດ່ ເວົ້າຕິແດ່ ຯລຯ ດ່າແດ່ ພາດພິງທວາຣຫນັກທວາຣເບົາຂອງສັຕວ໌ເດັຽຣະສານທັງ ໔ ຕົວ ຕ້ອງອາບັຕິທຸກກຏ ໔ ຕົວ

ຍິງແລະກະເທີຍ

(໑) ເປັນຍິງແລະກະເທີຍ (໔) ພິກສຸສຳຄັນວ່າເປັນຍິງທັງ ໔ ຄົນແລະມີຄວາມກຳຫນັດ (໓) ພິກສຸເວົ້າຊົມແດ່ ເວົ້າຕິແດ່ ຯລຯ ດ່າແດ່ ພາດພິງທວາຣຫນັກທວາຣເບົາຂອງທັງ ໔ ຄົນ ຕ້ອງອາບັຕິທຸກກຏກັບສັງຊາທິເສສ

(໑) ເປັນຍິງແລະກະເທີຍ (໔) ພິກສຸບໍ່ແນ່ໃຈວ່າເປັນຍິງແລະກະເທີຍທັງ ໔ ຄົນ ຯລຯ ຕ້ອງອາບັຕິທຸກກຏກັບຖຸລລັຈຈັຍ ຯລຯ ສຳຄັນວ່າເປັນກະເທີຍ ຯລຯ ຕ້ອງອາບັຕິຖຸລລັຈຈັຍ ໔ ຕົວ ຯລຯ ສຳຄັນວ່າເປັນຊາຍ ຯລຯ ຕ້ອງອາບັຕິທຸກກຏກັບຖຸລລັຈຈັຍຯລຯ ສຳຄັນວ່າເປັນສັຕວ໌ເດັຽຣະສານແລະມີຄວາມກຳຫນັດ (໓) ພິກສຸເວົ້າຊົມແດ່ ເວົ້າຕິແດ່ ຯລຯ ດ່າແດ່ ພາດພິງທວາຣຫນັກທວາຣເບົາຂອງທັງ ໔ ຄົນ ຕ້ອງອາບັຕິທຸກກຏກັບ
ຖຸລລັຈຈັຍ

ຍິງແລະຊາຍ

(໑) ເປັນຍິງແລະຊາຍ (໔) ພິກສຸສຳຄັນວ່າເປັນຍິງທັງ ໔ ຄົນແລະມີຄວາມກຳຫນັດ (໓) ພິກສຸເວົ້າຊົມແດ່ ເວົ້າຕິແດ່ ຯລຯ ດ່າແດ່ ພາດພິງທວາຣຫນັກທວາຣເບົາຂອງທັງ ໔ ຄົນ ຕ້ອງອາບັຕິທຸກກຏກັບສັງຊາທິເສສ

(໑) ເປັນຍິງແລະຊາຍ (໔) ພິກສຸບໍ່ແນ່ໃຈວ່າເປັນຍິງແລະຊາຍທັງ ໔ ຄົນ ຯລຯ ສຳຄັນວ່າເປັນກະເທີຍ ຯລຯ ສຳຄັນວ່າເປັນຊາຍ ຯລຯ ສຳຄັນວ່າເປັນສັຕວ໌ເດັຽຣະສານແລະມີຄວາມກຳຫນັດ (໓) ພິກສຸເວົ້າຊົມແດ່ ເວົ້າຕິແດ່ ຯລຯ ດ່າແດ່ ພາດພິງທວາຣຫນັກທວາຣເບົາຂອງທັງ ໔ ຄົນ ຕ້ອງອາບັຕິທຸກກຏກັບຖຸລລັຈຈັຍ

ຍິງແລະສັຕວ໌ເດັຽຣະສານ

(໑) ເປັນຍິງແລະສັຕວ໌ເດັຽຣະສານ (໔) ພິກສຸສຳຄັນວ່າເປັນຍິງທັງ ໔ ແລະມີຄວາມກຳຫນັດ (໓) ພິກສຸເວົ້າຊົມແດ່ ເວົ້າຕິແດ່ ຯລຯ ດ່າແດ່ ພາດພິງທວາຣຫນັກທວາຣເບົາຂອງທັງ ໔ ຄົນ ຕ້ອງອາບັຕິທຸກກຏກັບສັງຊາທິເສສ

(໑) ເປັນຍິງແລະສັຕວ໌ເດັຽຣະສານ (໔) ພິກສຸບໍ່ແນ່ໃຈວ່າເປັນຍິງແລະສັຕວ໌ເດັຽຣະສານທັງ ໔ ຯລຯ ສຳຄັນວ່າເປັນກະເທີຍ ຯລຯ ສຳຄັນວ່າເປັນຊາຍ ຯລຯ ສຳຄັນວ່າເປັນສັຕວ໌ເດັຽຣະສານແລະມີຄວາມກຳຫນັດ (໓) ພິກສຸເອົ້າຊົມແດ່ ເອົ້າຕິແດ່ ຯລຯ ດ່າແດ່ ພາດພິງທວາຣຫນັກທວາຣເບົາຂອງທັງ ໔ ຕ້ອງອາບັຕິທຸກກຕກັບຖຸລລັຈຈັຍ

ກະເທີຍແລະຊາຍ

(໑) ເປັນກະເທີຍແລະຊາຍ (໔) ພິກສຸສຳຄັນວ່າເປັນກະເທີຍທັງ ໔ ຄົນແລະມີຄວາມກຳຫນັດ (໓) ພິກສຸເອົ້າຊົມແດ່ ເອົ້າຕິແດ່ ຯລຯ ດ່າແດ່ ພາດພິງທວາຣຫນັກທວາຣເບົາຂອງທັງ ໔ ຄົນ ຕ້ອງອາບັຕິທຸກກຕກັບຖຸລລັຈຈັຍ
(໑) ເປັນກະເທີຍແລະຊາຍ (໔) ພິກສຸບໍ່ແນ່ໃຈວ່າເປັນກະເທີຍແລະຊາຍທັງ ໔ ຄົນ ຯລຯ ສຳຄັນວ່າເປັນຊາຍ ຯລຯ ສຳຄັນວ່າເປັນສັຕວ໌ເດັຽຣະສານ ຯລຯ ສຳຄັນວ່າເປັນຍິງແລະມີຄວາມກຳຫນັດ (໓) ພິກສຸເອົ້າຊົມແດ່ ເອົ້າຕິແດ່ ຯລຯ ດ່າແດ່ ພາດພິງທວາຣຫນັກທວາຣເບົາຂອງທັງ ໔ ຄົນ ຕ້ອງອາບັຕິທຸກກຕ ໔ ຕົວ

ກະເທີຍແລະສັຕວ໌ເດັຽຣະສານ

(໑) ເປັນກະເທີຍແລະສັຕວ໌ເດັຽຣະສານ (໔) ພິກສຸສຳຄັນວ່າເປັນກະເທີຍທັງ ໔ ແລະມີຄວາມກຳຫນັດ (໓) ພິກສຸເອົ້າຊົມແດ່ ເອົ້າຕິແດ່ ຯລຯ ດ່າແດ່ ພາດພິງທວາຣຫນັກທວາຣເບົາຂອງທັງ ໔ ຕ້ອງອາບັຕິທຸກກຕກັບຖຸລລັຈຈັຍ
(໑) ເປັນກະເທີຍແລະສັຕວ໌ເດັຽຣະສານ (໔) ພິກສຸບໍ່ແນ່ໃຈວ່າເປັນກະເທີຍແລະສັຕວ໌ເດັຽຣະສານທັງ ໔ ຯລຯ ສຳຄັນວ່າເປັນຊາຍ ຯລຯ ສຳຄັນວ່າເປັນສັຕວ໌ເດັຽຣະສານ ຯລຯ ສຳຄັນວ່າເປັນຍິງແລະມີຄວາມກຳຫນັດ (໓) ພິກສຸເອົ້າຊົມແດ່ ເອົ້າຕິແດ່ ຯລຯ ດ່າແດ່ ພາດພິງທວາຣຫນັກທວາຣເບົາຂອງທັງ ໔ ຕ້ອງອາບັຕິທຸກກຕ ໔ ຕົວ

ຊາຍແລະສັຕວ໌ເດັຽຣະສານ

(໑) ເປັນຊາຍແລະສັຕວ໌ເດັຽຣະສານ (໔) ພິກສຸສຳຄັນວ່າເປັນຊາຍທັງ ໔ ຯລຯ ບໍ່ແນ່ໃຈວ່າເປັນຊາຍແລະສັຕວ໌ເດັຽຣະສານທັງ ໔ ຯລຯ ສຳຄັນວ່າເປັນສັຕວ໌ເດັຽຣະສານ ຯລຯ ສຳຄັນວ່າເປັນຍິງ

ຯລຯ ສຳຄັນວ່າເປັນກະເທີຍແລະມີຄວາມກຳໜັດ (໓) ພິກສຸເອົາຊິມແດ່ເອົາຕີແດ່ ຯລຯ ດ່າແດ່ ພາດພິງທວາຣໜັກທວາຣເບົາຂອງທັງ ໔ ຕ້ອງອາບັຕິທຸກກຕ ໔ ຕົວ

ໃຕ້ຮາກຂວັນແລະເໜືອເຂົ່າ

(໑) ເປັນຍິງ (໒) ພິກສຸສຳຄັນວ່າເປັນຍິງແລະມີຄວາມກຳໜັດ (໓) ພິກສຸເອົາຊິມແດ່ ເອົາຕີແດ່ ຯລຯ ດ່າແດ່ ພາດພິງເຖິງອວັຍວະເບື້ອງເທິງໃຕ້ຮາກຂວັນລົງມາ ອວັຍວະເບື້ອງຕ່ຳເໜືອເຂົ່າຂຶ້ນໄປ ເວັ້ນທວາຣໜັກແລະທວາຣເບົາຂອງຍິງ ຕ້ອງອາບັຕິຖຸລລັຈຈັຍ ຯລຯ
(໑) ເປັນສັຕວ໌ເດັຽຣະສານ (໒) ພິກສຸສຳຄັນວ່າເປັນຍິງ ຯລຯ ຕ້ອງອາບັຕິທຸກກຕ
(໑) ເປັນຍິງ ໒ ຄົນ (໒) ພິກສຸສຳຄັນວ່າເປັນຍິງທັງ ໒ ຄົນແລະມີຄວາມກຳໜັດ (໓) ພິກສຸເອົາຊິມແດ່ ເອົາຕີແດ່ ຯລຯ ດ່າແດ່ ພາດພິງເຖິງອວັຍວະເບື້ອງເທິງໃຕ້ຮາກຂວັນລົງມາ ອວັຍວະເບື້ອງຕ່ຳເໜືອເຂົ່າຂຶ້ນໄປ ເວັ້ນທວາຣໜັກແລະທວາຣເບົາຂອງຍິງທັງ ໒ ຕ້ອງອາບັຕິຖຸລລັຈຈັຍ ໒ ຕົວ ຯລຯ

(໑) ເປັນຍິງແລະກະເທີຍ (໒) ພິກສຸສຳຄັນວ່າເປັນຍິງທັງ ໒ ຄົນແລະມີຄວາມກຳໜັດ (໓) ພິກສຸເອົາຊິມແດ່ ເອົາຕີແດ່ ຯລຯ ດ່າແດ່ ພາດພິງເຖິງອວັຍວະເບື້ອງເທິງໃຕ້ຮາກຂວັນລົງມາ ອວັຍວະເບື້ອງຕ່ຳເໜືອເຂົ່າຂຶ້ນໄປ ເວັ້ນທວາຣໜັກແລະທວາຣເບົາຂອງທັງ ໒ ຄົນ ຕ້ອງອາບັຕິທຸກກຕກັບຖຸລລັຈຈັຍ ຯລຯ

ເໜືອຮາກຂວັນແລະໃຕ້ເຂົ່າ

(໑) ເປັນຍິງ (໒) ພິກສຸສຳຄັນວ່າເປັນຍິງແລະມີຄວາມກຳໜັດ (໓) ພິກສຸເອົາຊິມແດ່ ເອົາຕີແດ່ ຯລຯ ດ່າແດ່ ພາດພິງເຖິງອວັຍວະເບື້ອງເທິງເໜືອຮາກຂວັນຂຶ້ນໄປ ອວັຍວະເບື້ອງຕ່ຳໃຕ້ເຂົ່າລົງມາຂອງຍິງ ຕ້ອງອາບັຕິທຸກກຕ
(໑) ເປັນກະເທີຍ (໒) ພິກສຸສຳຄັນວ່າເປັນຍິງ ຯລຯ (໑) ເປັນຊາຍ (໒) ພິກສຸສຳຄັນວ່າເປັນຍິງ ຯລຯ (໑) ສັຕວ໌ເດັຽຣະສານ (໒) ພິກສຸສຳຄັນວ່າເປັນຍິງ ຯລຯ ຕ້ອງອາບັຕິທຸກກຕ
(໑) ເປັນຍິງ ໒ ຄົນ (໒) ພິກສຸສຳຄັນວ່າເປັນຍິງທັງ ໒ ຄົນແລະມີຄວາມກຳໜັດ (໓) ພິກສຸເອົາຊິມແດ່ ເອົາຕີແດ່ ຯລຯ ດ່າແດ່ ພາດພິງເຖິງອວັຍວະເບື້ອງເທິງເໜືອຮາກຂວັນຂຶ້ນໄປ ອວັຍວະເບື້ອງຕ່ຳໃຕ້ເຂົ່າລົງມາຂອງຍິງທັງ ໒ ຄົນ ຕ້ອງອາບັຕິທຸກກຕ ໒ ຕົວ ຯລຯ

(໑) ເປັນຍິງແລະກະເທີຍ (໔) ພິກສຸສຳຄັນວ່າເປັນຍິງທັງ ໔ ຄົນແລະມີຄວາມກຳຫນັດ (໓) ພິກສຸເວົ້າຊົມແດ່ ເວົ້າຕິແດ່ ຯລຯ ດ່າແດ່ ພາດພິງເຖິງອວັຍວະເບື້ອງເທິງເຫນືອຣາກຂວັນຂຶ້ນໄປ ອວັຍວະເບື້ອງຕ່ຳໃຕ້ເຂົ່າລົງມາຂອງທັງ ໔ ຄົນ ຕ້ອງອາບັຕິທຸກກຕ ໔ ຕົວ ຯລຯ

## ເວົ້າພາດພິງເຖິງຂອງທີ່ເນື່ອງດ້ວຍກາຍ

(໑) ເປັນຍິງ (໔) ພິກສຸສຳຄັນວ່າເປັນຍິງແລະມີຄວາມກຳຫນັດ (໓) ພິກສຸເວົ້າຊົມແດ່ ເວົ້າຕິແດ່ ຯລຯ ດ່າແດ່ ພາດພິງເຖິງຂອງທີ່ເນື່ອງດ້ວຍກາຍຂອງຍິງ ຕ້ອງອາບັຕິທຸກກຕ

## ພຣະວິນັຍປິດົກ ມຫາວິພັງຄ໌ [໔. ສັງຂາທິເສສກັນຫ໌] ໓. ທຸດຖຸລລວາຈາສິກຂາບົທ ຄາຖາຣວມວິນີຕວັຕຖຸ

(໑) ເປັນກະເທີຍ ຯລຯ (໑) ເປັນຊາຍ ຯລຯ (໑) ເປັນສັຕວ໌ເດັຽຣະສານ ຯລຯ ຕ້ອງອາບັຕິທຸກກຕ

(໑) ເປັນຍິງ ໔ ຄົນ (໔) ພິກສຸສຳຄັນວ່າເປັນຍິງທັງ ໔ ຄົນແລະມີຄວາມກຳຫນັດ

(໓) ພິກສຸເວົ້າຊົມແດ່ ເວົ້າຕິແດ່ ຯລຯ ດ່າແດ່ ພາດພິງເຖິງຂອງທີ່ເນື່ອງດ້ວຍກາຍຂອງຍິງທັງ ໔ ຄົນ ຕ້ອງອາບັຕິທຸກກຕ ໔ ຕົວ ຯລຯ

(໑) ເປັນຍິງແລະກະເທີຍ (໔) ພິກສຸສຳຄັນວ່າເປັນຍິງທັງ ໔ ຄົນແລະມີຄວາມກຳຫນັດ (໓) ພິກສຸເວົ້າຊົມແດ່ ເວົ້າຕິແດ່ ຯລຯ ດ່າແດ່ ພາດພິງເຖິງຂອງທີ່ເນື່ອງດ້ວຍກາຍຂອງທັງ ໔ ຕ້ອງອາບັຕິທຸກກຕ ໔ ຕົວ ຯລຯ

## ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໔໗໗] ໑. ພິກສຸມຸ່ງອັນຖະ

໔. ພິກສຸມຸ່ງທັມ

໓. ພິກສຸມຸ່ງພ່ຳສອນ

໔. ພິກສຸວິກົລຈິຕ

໕. ພິກສຸຕົ້ນບັນຍັຕ

## ຄາຖາຮວມວິນີຕວັຕຖຸ
## ເຣື່ອງທີ່ຊົງວິນິຈສັຍແລ້ວ

ເຣື່ອງຜ້າກັມພົລສີແດງ ໑ ເຣື່ອງ ▫ເຣື່ອງຜ້າກຳພລຂົນແຂງ ໑ ເຣື່ອງ ▫ເຣື່ອງຜ້າກັມພົລຂົນຫາຍອງ ໑ ເຣື່ອງ ▫ເຣື່ອງຜ້າກັມພົລຂນຫຍາບ ໑ ເຣື່ອງ ▫ເຣື່ອງຜ້າຫົ່ມຂນຍາວ ໑ ເຣື່ອງ ▫ເຣື່ອງນາຫວ່ານ ໑ ເຣື່ອງ ▫ເຣື່ອງຫົນທາງຮາບພຽງ ໑ ເຣື່ອງ ▫ເຣື່ອງມີສັດຫາ ໑ ເຣື່ອງ ▫ເຣື່ອງໃຫ້ທານ ໑ ເຣື່ອງ ▫ເຣື່ອງທຳງານ ໖ ເຣື່ອງ

## ເຣື່ອງຜ້າກັມພົລສີແດງ ໑ ເຣື່ອງ

[໔໗໗] ສມັຍນັ້ນ ຍິງຄົນນຶ່ງຫົ່ມຜ້າກັມພົລໃຫມ່ສີແດງ ພິກສຸຮູບນຶ່ງມີຄວາມກຳຫນັດ ໄດ້ກ່າວກັບທ່ານວ່າ "ນ້ອງຍິງ ທ່ານມີສີແດງແທ້" ແຕ່ນາງບໍ່ເຂົ້າໃຈຄວາມຫມາຍຈຶ່ງກ່າວວ່າ "ແມ່ນແລ້ວຂະນ້ອຍ ພຣະຄຸນເຈົ້າ ຜ້າກັມພົລໃຫມ່ສີແດງ" ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິສັງຂາທິເສສຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິສັງຂາທິເສສ ແຕ່ຕ້ອງອາບັຕິທຸກກຕ" (ເຣື່ອງທີ ໑)

## ເຣື່ອງຜ້າກັມພົລຂົນແຂງ ໑ ເຣື່ອງ

ສມັຍນັ້ນ ຍິງຄົນນຶ່ງຫົ່ມຜ້າກັມພົລຂົນແຂງ ພິກສຸຮູບນຶ່ງມີຄວາມກຳຫນັດ ໄດ້ກ່າວກັບທ່ານວ່າ "ນ້ອງຍິງ ທ່ານມີຂົນແຂງແທ້" ແຕ່ນາງບໍ່ເຂົ້າໃຈຄວາມຫມາຍຈຶ່ງກ່າວວ່າ "ແມ່ນແລ້ວຂະນ້ອຍ ພຣະຄຸນເຈົ້າ ຜ້າກັມພົລຂົນແຂງ" ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິສັງຂາທິເສສຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິສັງຂາທິເສສ ແຕ່ຕ້ອງອາບັຕິທຸກກຕ" (ເຣື່ອງທີ ໔)

## ເຣື່ອງຜ້າກັມພົລຂົນຫຍອງ ໑ ເຣື່ອງ

ສມັຍນັ້ນ ຍິງຄົນນຶ່ງຫົ່ມຜ້າກັມພົລຂຸກໃຫມ່ ພິກສຸຮູບນຶ່ງມີຄວາມກຳຫນັດ ໄດ້ກ່າວກັບທ່ານວ່າ "ນ້ອງຍິງ ທ່ານມີຂົນຫຍອງ" ແຕ່ນາງບໍ່ເຂົ້າໃຈຄວາມຫມາຍຈຶ່ງກ່າວວ່າ "ແມ່ນແລ້ວຂະນ້ອຍ ພຣະຄຸນເຈົ້າ ຜ້າກັມພົລ ຂົນຫຍອງ" ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິສັງຂາທິເສສຫລືບໍ່

ຈຶ່ງນໍາເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງ ອາບັຕິສັງຂາທິເສສ ແຕ່ຕ້ອງອາບັຕິທຸກກຕ" (ເອື້ອງທີ ໓)

## ເອື້ອງຜ້າກົມພົລຂນຫຍາບ ໑ ເອື້ອງ

ສມັຍນັ້ນ ຍິງຄົນນຶ່ງຫົ່ມຜ້າກົມພົລຂົນຫຍາບ ພິກສຸຮູບນຶ່ງມີຄວາມກໍາຫນັດ ໄດ້ກ່າວກັບທ່ານວ່າ "ນ້ອງຍິງ ທ່ານມີຂົນຫຍາບ" ແຕ່ນາງບໍ່ເຂົ້າໃຈຄວາມຫມາຍຈຶ່ງກ່າວວ່າ "ແມ່ນແລ້ວຂະນ້ອຍ ພຣະຄຸນເຈົ້າ ຜ້າກົມພົລ ຂົນຫຍາບ" ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິສັງຂາທິເສສຫລືບໍ່ ຈຶ່ງນໍາເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງ ອາບັຕິສັງຂາທິເສສ ແຕ່ຕ້ອງອາບັຕິທຸກກຕ" (ເອື້ອງທີ ໔)

## ເອື້ອງຜ້າຫົ່ມຂນຍາວ ໑ ເອື້ອງ

ສມັຍນັ້ນ ຍິງຄົນນຶ່ງຫົ່ມຜ້າຫົ່ມຂນຍາວ ພິກສຸຮູບນຶ່ງມີຄວາມກໍາຫນັດ ໄດ້ກ່າວ
ກັບທ່ານວ່າ "ນ້ອງຍິງ ທ່ານມີຂນຍາວ" ແຕ່ນາງບໍ່ເຂົ້າໃຈຄວາມຫມາຍຈຶ່ງກ່າວວ່າ "ແມ່ນແລ້ວຂະ
ນ້ອຍ
ພຣະຄຸນເຈົ້າ ຜ້າຫົ່ມຂນຍາວ" ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິສັງຂາທິເສສຫລືບໍ່ ຈຶ່ງນໍາເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງ ອາບັຕິສັງຂາທິເສສ ແຕ່ຕ້ອງອາບັຕິທຸກກຕ" (ເອື້ອງທີ ໕)

## ເອື້ອງນາຫວ່ານ ໑ ເອື້ອງ

[໔໗໙] ສມັຍນັ້ນ ຍິງຄົນນຶ່ງຫວ່ານນາແລ້ວຍ່າງມາ ພິກສຸຮູບນຶ່ງມີຄວາມກໍາຫນັດ ໄດ້ກ່າວກັບທ່ານວ່າ "ນ້ອງຍິງ ທ່ານຫວ່ານແລ້ວ ແລ້ວຫລື" ແຕ່ນາງບໍ່ເຂົ້າໃຈຄວາມຫມາຍຈຶ່ງກ່າວວ່າ "ແມ່ນແລ້ວຂະນ້ອຍ ພຣະຄຸນເຈົ້າ ຫວ່ານແລ້ວແລ້ວ ແຕ່ຍັງບໍ່ໄດ້ໄຖຖົມ" ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິສັງຂາທິເສສຫລືບໍ່ ຈຶ່ງນໍາເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິສັງຂາທິເສສແຕ່ຕ້ອງອາບັຕິທຸກກຕ" (ເອື້ອງທີ ໖)

## ເອື້ອງຫີນທາງຮາບພຽງ ໑ ເອື້ອງ

ສມັຍນັ້ນ ພິກສຸຮູບນຶ່ງພົບນາງປຣິພາຊິກາຍ່າງສວນທາງມາ ມີຄວາມກຳຫນັດ ໄດ້ກ່າວກັບທ່ານວ່າ "ນ້ອງຍິງ ທາງຂອງທ່ານຮາບພຽງຫລື" ແຕ່ນາງບໍ່ເຂົ້າໃຈຄວາມຫມາຍຈຶ່ງກ່າວວ່າ "ຂະນ້ອຍ ນິມົນຕ໌ພຣະຄຸນເຈົ້າຍ່າງໄປເຖີດ" ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິສັງຂາທິເສສຫລືບໍ່ ຈຶ່ງນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິສັງຂາທິເສສ ແຕ່ຕ້ອງອາບັຕິທຸກກຕ" (ເຣື່ອງທີ ໗)

## ເຣື່ອງມີສັດທາ ໑ ເຣື່ອງ

ສມັຍນັ້ນ ພິກສຸຮູບນຶ່ງມີຄວາມກຳຫນັດ ໄດ້ກ່າວກັບຍິງຄົນນຶ່ງວ່າ "ນ້ອງຍິງ ທ່ານເປັນຄົນມີສັດທາ ຈະຖວາຍສິ່ງທີ່ທ່ານໃຫ້ແກ່ສາມີ ແກ່ພວກອາຕມາແດ່ບໍ່ໄດ້ຫລື" "ແມ່ນຫຍັງຂະນ້ອຍ" ພິກສຸນັ້ນຕອບວ່າ"ເມຖຸນທັມ" ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິສັງຂາທິເສສຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິສັງຂາທິເສສ" (ເຣື່ອງທີ ໘)

## ເຣື່ອງໃຫ້ທານ ໑ ເຣື່ອງ

ສມັຍນັ້ນ ພິກສຸຮູບນຶ່ງມີຄວາມກຳຫນັດ ໄດ້ກ່າວກັບຍິງຄົນນຶ່ງວ່າ "ນ້ອງຍິງ ທ່ານເປັນຄົນມີສັດທາ ຈະຖວາຍທານອັນເລີສແກ່ພວກອາຕມາແດ່ບໍ່ໄດ້ຫລື" "ແມ່ນຫຍັງຂະນ້ອຍ" ພິກສຸນັ້ນຕອບວ່າ "ເມຖຸນທັມ" ແລ້ວເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິສັງຂາທິເສສຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິສັງຂາທິເສສ" (ເຣື່ອງທີ ໙)

## ເຣື່ອງທຳງານ ໑ ເຣື່ອງ

ສມັຍນັ້ນ ຍິງຄົນນຶ່ງກຳລັງທຳງານຢູ່ ພິກສຸຮູບນຶ່ງມີຄວາມກຳຫນັດ ໄດ້ກ່າວກັບທ່ານວ່າ "ນ້ອງຍິງ ຢຸດເຖີດ ອາຕມາຈັກຊ່ອຍທຳ" ແຕ່ນາງບໍ່ຮູ້ຄວາມຫມາຍ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິສັງຂາທິເສສຫລືບໍ່ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິສັງຂາທິເສສ ແຕ່ຕ້ອງອາບັຕິທຸກກຕ" (ເຣື່ອງທີ ໑໐)

ສມັຍນັ້ນ ຍິງຄົນນຶ່ງກຳລັງທຳງານຢູ່ ພິກສຸຮູບນຶ່ງມີຄວາມກຳຫນັດ ໄດ້ກ່າວກັບທ່ານວ່າ "ນ້ອງຍິງ ນັ່ງເຖີດ ອາຕມາຈັກຊ່ອຍທຳ" ແຕ່ນາງບໍ່ຮູ້ຄວາມຫມາຍ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິສັງຂາທິເສສ ຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິສັງຂາທິເສສ ແຕ່ຕ້ອງອາບັຕິທຸກກາຕ" (ເຣື້ອງທີ ໑໑)

ສມັຍນັ້ນ ຍິງຄົນນຶ່ງກຳລັງທຳງານຢູ່ ພິກສຸຮູບນຶ່ງມີຄວາມກຳຫນັດ ໄດ້ກ່າວກັບທ່ານວ່າ "ນ້ອງຍິງນອນພັກເຖີດ ອາຕມາຈັກຊ່ອຍທຳ" ແຕ່ນາງບໍ່ຮູ້ຄວາມຫມາຍ ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິສັງຂາທິເສສຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານບໍ່ຕ້ອງອາບັຕິສັງຂາທິເສສ ແຕ່ຕ້ອງອາບັຕິທຸກກາຕ" (ເຣື້ອງທີ ໑໔)

ທຸຕຖຸລລວາຈາສິກຂາບົທທີ ໓ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ສັງຂາທິເສສກັນຫ໌] ໔. ອັຕຕກາມປາຣິຈຣິຍສິກຂາບົທ ນິທານວັຕຖຸ

## ໔. ອັຕຕກາມປາຣິຈຣິຍສິກຂາບົທ

### ວ່າດ້ວຍກາຣໃຫ້ບຳເຣີຄວາມໃຄ່ຂອງຕົນ

### ເຣື້ອງພຣະອຸທາຍີ

[໔໙໐] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ທ່ານພຣະອຸທາຍີເປັນພຣະທີ່ໃກ້ຊິດຕະກູນໃນກຸງສາວັຕຖີ ໄປມາຫາສູ່ຕະກູນເປັນອັນມາກ ສມັຍນັ້ນ ມີແມ່ຫມ້າຍຄົນນຶ່ງຮູບງາມ ຫນ້າເບິ່ງ ຫນ້າຊົມ ຄັນເວລາເຊົ້າ ທ່ານພຣະອຸທາຍີຄອງອັນຕຣວາສກ ຖືບາຕຣແລະຈີວອນຍ່າງໄປເຖິງເຮືອນແມ່ຫມ້າຍນັ້ນຄັນເຖິງແລ້ວຈຶ່ງນັ່ງເທິງອາສນະທີ່ເຂົາຈັດໄວ້ ຄັນແລ້ວແມ່ຫມ້າຍຈຶ່ງເຂົ້າໄປຫາເຖິງທີ່ທ່ານພຣະອຸທາຍີນັ່ງ ຂາບແລ້ວນັ່ງ ນະ ທີ່ສົມຄວຣ ຄັນແລ້ວທ່ານພຣະອຸທາຍີຊີ້ແຈງໃຫ້ແມ່ຫມ້າຍເຫັນແຈ້ງ ຊວນໃຫ້ຢາກຮັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນເບີກບານດ້ວຍທັມມີກຖາ ຄັ້ງນັ້ນ ແມ່ຫມ້າຍໄດ້ກ່າວປວາຣນາ ທ່ານພຣະອຸທາຍີວ່າ "ພຣະຄຸນເຈົ້າ ໄປດບອກເຖີດ ທ່ານຕ້ອງກາຣສິ່ງໃດທີ່ຂະນ້ອຍສາມາດຈັດຖວາຍໄດ້ ຄື ຈີວອນ ບິນທບາຕ ເສນາສນະ

ແລະຄິລານປັຈຈັຍເພສັຊບໍຣິຂາຣ” “ປັຈຈັຍເຫລົ່ານັ້ນຫາໄດ້ບໍ່ຍາກ ທ່ານຈົ່ງຖວາຍສິ່ງທີ່ຫາໄດ້ຍາກແກ່ອາຕມາເຖີດ” “ແມ່ນຫຍັງຫລື ຂະນ້ອຍ” “ເມຖຸນທັມ” “ທ່ານຕ້ອງການຫລືຂະນ້ອຍ” “ອາຕມາຕ້ອງ ການ” ແມ່ຫມ້າຍຈຶ່ງກ່າວວ່າ “ນິມົນຕ໌ທ່ານມາເຖີດຂະນ້ອຍ” ແລ້ວເດີນເຂົ້າຫ້ອງເປືອງຜ້ານຸ່ງແລ້ວນອນຫງາຍເທິງຕຽງ ຂນະນັ້ນ ທ່ານພຣະອຸທາຍີເດີນຕາມນາງເຂົ້າໄປເຖິງຕຽງກ່າວວ່າ “ໃຜຈັກລູບຄຳຍິງຖ່ອຍມີກິ່ນເຫມັນຄົນນີ້ໄດ້” ຖົ່ມນ້ຳລາຍແລ້ວຈາກໄປ ແມ່ຫມ້າຍຕຳຫນິ ປະນາມໂພນທະນາວ່າ “ພຣະສມນະເຊື້ອສາຍສກາຍບຸຕຣເຫລົ່ານີ້ ບໍ່ມີຢາງອາຍ ທຸສີລ ຊອບເວົ້າເທັຈແຕ່ກໍປະຕິຍານວ່າ ປະພຶດທັມ ປະພຶດສງົບ ປະພຶດ ພຣົມຈັນຍ໌ ເວົ້າຄວາມຈິງ ມີສີລ ມີກັລຍານທັມພວກທ່ານບໍ່ມີຄວາມເປັນສມນະ ບໍ່ມີຄວາມເປັນພຣາມນ໌ ຄວາມເປັນສມນະຄວາມເປັນພຣາມນ໌ຂອງພວກທ່ານເສື່ອມສິ້ນໄປແລ້ວ ພວກທ່ານຈະເປັນສມນະ ເປັນ ພຣາມນ໌ໄດ້ຢ່າງໃດ ພວກທ່ານປາສຈາກຄວາມເປັນສມນະ ປາສຈາກຄວາມເປັນພຣາມນ໌ ຈັ່ງໃດພຣະສມນະອຸທາຍີຂໍເມຖຸນທັມກັບເຮົາແລ້ວ ກັບຖົ່ມນ້ຳລາຍກ່າວວ່າ ‘ໃຜຈັກລູບຄຳຍິງຖ່ອຍມີກິ່ນເຫມັນຄົນນີ້ໄດ້’ ແລ້ວຈາກໄປລະ ເຮົາມີຫຍັງຊົ່ວຫລາຍຫລື ມີຫຍັງທີ່ເປັນມີກິ່ນເຫມັນຫລື ເຮົາຊົ່ວກວ່າຍິງຄົນອື່ນຢ່າງໃດ” ແມ່ນຍິງພວກອື່ນກໍພາກັນຕຳຫນິ ປະນາມ ໂພນທະນາວ່າ “ພຣະສມນະເຊື້ອສາຍສກາຍບຸຕຣເຫລົ່ານີ້ ບໍ່ມີຢາງອາຍທຸສີລ ມັກ ກ່າວເທັຈ ຯລຯ ແມ່ຫມ້າຍນີ້ມີຫຍັງຊົ່ວແທ້ຫລື ມີຫຍັງທີ່ເປັນກິ່ນເຫມັນຫລື ນາງຊົ່ວກວ່າຍິງອື່ນຢ່າງໃດ” ພິກສຸທັງຫລາຍໄດ້ຍິນຍິງເຫລົ່ານັ້ນຕຳຫນິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ສັນໂດສ ມີຄວາມລະອາຍ ມີຄວາມຣະມັດຣະວັງ ໃຝ່ການສຶກສາ ຈຶ່ງພາກັນຕຳຫນິປະນາມໂພນທະນາວ່າ “ຈັ່ງໃດທ່ານພຣະອຸທາຍີຈຶ່ງເວົ້າສັຣເສີນການບຳເຣີຄວາມໃຄ່ຂອງຕົນຕໍ່ຫນ້າມາຕຸຄາມລະ” ຄັນພິກສຸທັງຫລາຍຕຳຫນິທ່ານພຣະອຸທາຍີໂດຍປະການຕ່າງໆ ແລ້ວຈຶ່ງນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

## ຊົງປະຊຸມສົງຂ໌ບັນຍັຕສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເອື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະອຸທາຍີວ່າ “ອຸທາຍີ ຊາບວ່າ ທ່ານກ່າວສັຣເສີນການບຳເຣີຄວາມໃຄ່ຂອງຕົນຕໍ່ຫນ້າມາຕຸຄາມແມ່ນແທ້ບໍ” ທ່ານທູລຮັບວ່າ “ແມ່ນແທ້ພຣະພຸທທເຈົ້າຂ້າ” ພຣະຜູ້ມີພຣະພາຄພຸທທເຈົ້າ ຊົງຕຳຫນິວ່າ “ໂມຂບຸຣຸສ ການກະທຳຂອງທ່ານ ບໍ່ສົມຄວຣ ບໍ່ຄ້ອຍຕາມ ບໍ່ເຫມາະສົມ ບໍ່ແມ່ນກິຈຂອງສມນະ ໃຊ້ບໍ່ໄດ້ ບໍ່ຄວຣທຳ ໂມຂບຸຣຸສ ຈັ່ງໃດທ່ານຈຶ່ງໄດ້ກ່າວສັຣເສີນການໃຫ້ບຳເຣີຄວາມໃຄ່ຂອງຕົນຕໍ່ຫນ້າມາຕຸຄາມລະ ໂມຂບຸຣຸສ ເຮົາສະແດງທັມໂດຍປະການຕ່າງໆ ເພື່ອຄາຍກຳຫນັດ ບໍ່

ແມ່ນເພື່ອຄວາມກຳຫນັດ ຯລຯ ເຮົາບອກການຣະງັບຄວາມກັດກຸ້ມເພາະກາມໄວ້ໂດຍປະການຕ່າງໆ ບໍ່ແມ່ນບໍ ໂມຊບຸຣຸສ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ສັງຂາທິເສສກັນຫ໌] ໔. ອັຕຕກາມປາຣິຈຣິຍສິກຂາບົທ ສິກຂາບົທວິພັງຄ໌

ພຣະບັນຍັຕ

[໔໙໑] ກໍ ພິກສຸໃດຖືກຣາຄະຄອບງຳແລ້ວ ມີຈິຕຄອນແຄນ ກ່າວສັຣເສີນການບຳເຣີຄວາມໃຄ່ຂອງຕົນຕໍ່ຫນ້າມາຕຸຄາມ ດ້ວຍຄຳທີ່ພາດພິງເມຖຸນວ່າ "ນ້ອງຍິງ ຍິງໃດບຳເຣີຜູ້ປະພຶດພຣົມຈັນຍ໌ຜູ້ມີສີລມີກັລຍານທັມເຊັ່ນເຮົາດ້ວຍທັມນັ້ນ ການບຳເຣີນີ້ຂອງຍິງ ນັ້ນເປັນການບຳເຣີຊັ້ນຍອດ" ເປັນສັງຂາທິເສສ

ເຣື້ອງພຣະອຸທາຍີ ຈົບ

ສິກຂາບົທວິພັງຄ໌

[໔໙໔] ຄຳວ່າ ກໍ...ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ພຣະຜູ້ມີພຣະພາຄຕຣັສວ່າ ກໍ...ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ທີ່ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ຖືກຣາຄະຄອບງຳແລ້ວ ຄື ມີຄວາມຍິນດີ ເພ່ງເລັງ ມີຈິຕຮັກໃຄ່

ຄຳວ່າ ຄອນແຄນ ຄວາມວ່າ ຈິຕກຳຫນັດແລ້ວຊື່ວ່າຄອນແຄນແດ່ ຈິຕໂກດແລ້ວຊື່ວ່າຄອນແຄນແດ່ ຈິຕຫລົງແລ້ວຊື່ວ່າຄອນແຄນແດ່ ແຕ່ຈິຕກຳຫນັດແລ້ວ ພຣະຜູ້ມີພຣະພາຄຊົງປະສົງຄ໌ວ່າ ຄອນແຄນ ໃນຄວາມຫມາຍນີ້

ທີ່ຊື່ວ່າ ມາຕຸຄາມ ໄດ້ແກ່ ຍິງມນຸສຍ໌ ບໍ່ແມ່ນນາງຍັກສ໌ ບໍ່ແມ່ນນາງເຜດ ບໍ່ແມ່ນສັຕວ໌ເດັຽຣະສານໂຕແມ່ ແຕ່ເປັນຍິງທີ່ຮູ້ດຽງສາ ສາມາດຮັບຮູ້ຖ້ອຍຄຳສຸພາສິຕ ທຸພພາສິຕ ຄຳຫຍາບແລະຄຳສຸພາພ

ຄຳວ່າ ຕໍ່ໜ້າມາຕຸຄາມ ຄື ທີ່ໃກ້ມາຕຸຄາມ ບໍ່ໄກຈາກມາຕຸຄາມ

ຄຳວ່າ ຄວາມໃຄ່ຂອງຕົນ ໄດ້ແກ່ ຄວາມໃຄ່ຂອງຕົນ ເຫຕຸຂອງຕົນ ຄວາມປະສົງຄ໌ຂອງຕົນ ການບຳເຣີຂອງ ຕົນ

ຄຳວ່າ ນີ້...ຊັ້ນຍອດ ຄື ນີ້ເປັນຍອດ ນີ້ປະເສີດທີ່ສຸດ ນີ້ເປັນຊັ້ນແນວໜ້າ ນີ້ສູງສຸດ ນີ້ເປັນສິ່ງເລີສ

ຄຳວ່າ ຍິງໃດ ໄດ້ແກ່ ຍິງວັນນະກສັຕຣິຍ໌ ຫລືວັນນະພຣາມນ໌ ຍິງວັນນະແພສຍ໌ ຫລືຍິງວັນນະສູທຣ

ຄຳວ່າ ເຊັ່ນເຮົາ ຄື ເປັນກສັຕຣິຍ໌ ຫລືພຣາມນ໌ ແພສຍ໌ ຫລືສູທຣ

ຄຳວ່າ ມີສີລ ຄື ຜູ້ເວັ້ນຂາດຈາກປານາຕິບາຕ ເວັ້ນຂາດຈາກອທິນນາທານ ເວັ້ນຂາດຈາກມຸສາວາທ

ຄຳວ່າ ຜູ້ປະພຶດພຣົມຈັນຍ໌ ຄື ຜູ້ເວັ້ນຂາດຈາກເມຖຸນທັມ

ທີ່ຊື່ວ່າ ມີກັລຍານທັມ ຄື ຜູ້ຊື່ວ່າມີທັມງາມເພາະສີລນັ້ນແລະພຣົມຈັນຍ໌ນັ້ນ

ຄຳວ່າ ດ້ວຍທັມນັ້ນ ຄື ດ້ວຍເມຖຸນທັມ

ຄຳວ່າ ບຳເຣີ ຄື ອພິຣົມຍ໌

ຄຳວ່າ ດ້ວຍຄຳທີ່ພາດພິງເມຖຸນ ຄື ດ້ວຍຖ້ອຍຄຳທີ່ກ່ຽວດ້ວຍເມຖຸນທັມ

ຄຳວ່າ ເປັນສັງຄາທິເສສ ຄວາມວ່າ ສຳລັບອາບັຕິນັ້ນ ສົງຄ໌ເທົ່ານັ້ນໃຫ້ປຣິວາສ ຯລຯ ເພາະເຫຕຸນັ້ນ ພຣະຜູ້ມີພຣະພາຄຈຶ່ງຕຣັສວ່າ "ເປັນສັງຄາທິເສສ"

ບົທພາຊນີຍ໌

ຍິງ

[໔໙໓] (໑) ເປັນຍິງ (໒) ພິກສຸສຳຄັນວ່າເປັນຍິງແລະມີຄວາມກຳໜັດ (໓) ພິກສຸກ່າວສັຣເສີນການບຳເຣີຄວາມໃຄ່ຂອງຕົນຕໍ່ໜ້າຍິງ ຕ້ອງອາບັຕິສັງຄາທິເສສ

(໑) ເປັນຍິງ (໒) ພິກສຸບໍ່ແນ່ໃຈວ່າເປັນຍິງ ຯລຯ ສຳຄັນວ່າເປັນກະເທີຍ ຯລຯ ສຳຄັນວ່າເປັນຊາຍ ຯລຯ ສຳຄັນວ່າເປັນສັຕວ໌ເດັຽຣະສານແລະມີຄວາມກຳໜັດ (໓) ພິກສຸກ່າວສັຣເສີນການບຳເຣີຄວາມໃຄ່ຂອງຕົນຕໍ່ໜ້າຍິງ ຕ້ອງອາບັຕິຖຸລລັຈຈັຍ

ກະເທີຍ

(໑) ເປັນກະເທີຍ (໒) ພິກຂຸສຳຄັນວ່າເປັນກະເທີຍແລະມີຄວາມກຳຫນັດ (໓) ພິກຂຸກ່າວສັຣເສີນການບຳເຣີຄວາມໃຄ່ຂອງຕົນຕໍ່ຫນ້າກະເທີຍ ຕ້ອງອາບັຕິຖຸລລັຈຈັຍ (໑) ເປັນກະເທີຍ (໒) ພິກຂຸບໍ່ແນ່ໃຈວ່າເປັນກະເທີຍ ຯລຯ ສຳຄັນວ່າເປັນຊາຍ ຯລຯ ສຳຄັນວ່າເປັນສັຕວ໌ເດັຽຣະສານ ຯລຯ ສຳຄັນວ່າເປັນຍິງແລະມີຄວາມກຳຫນັດ

(໓) ພິກຂຸກ່າວສັຣເສີນການບຳເຣີຄວາມໃຄ່ຂອງຕົນຕໍ່ຫນ້າກະເທີຍ ຕ້ອງອາບັຕິທຸກກຕ

ຊາຍ

(໑) ເປັນຊາຍ (໒) ພິກຂຸສຳຄັນວ່າເປັນຊາຍ ຯລຯ ບໍ່ແນ່ໃຈວ່າເປັນຊາຍ ຯລຯ ສຳຄັນວ່າເປັນສັຕວ໌ເດັຽຣະສານ ຯລຯ ສຳຄັນວ່າເປັນຍິງ ຯລຯ ສຳຄັນວ່າເປັນກະເທີຍແລະມີຄວາມກຳຫນັດ (໓) ພິກຂຸກ່າວສັຣເສີນການບຳເຣີຄວາມໃຄ່ຂອງຕົນຕໍ່ຫນ້າຊາຍຕ້ອງອາບັຕິທຸກກຕ

ສັຕວ໌ເດັຽຣະສານ

(໑) ເປັນສັຕວ໌ເດັຽຣະສານ (໒) ພິກຂຸສຳຄັນວ່າເປັນສັຕວ໌ເດັຽຣະສານ ຯລຯ ບໍ່ແນ່ໃຈວ່າເປັນສັຕວ໌ເດັຽຣະສານ ຯລຯ ສຳຄັນວ່າເປັນຍິງ ຯລຯ ສຳຄັນວ່າເປັນກະເທີຍ ຯລຯ ສຳຄັນວ່າເປັນຊາຍແລະມີຄວາມກຳຫນັດ (໓) ພິກຂຸກ່າວສັຣເສີນການບຳເຣີຄວາມໃຄ່ຂອງຕົນຕໍ່ຫນ້າສັຕວ໌ເດັຽຣະສານ ຕ້ອງອາບັຕິທຸກກຕ

ຍິງ ໒ ຄົນ

(໑) ເປັນຍິງ ໒ ຄົນ (໒) ພິກຂຸສຳຄັນວ່າເປັນຍິງທັງ ໒ ຄົນແລະມີຄວາມກຳຫນັດ (໓) ພິກຂຸກ່າວສັຣເສີນການບຳເຣີຄວາມໃຄ່ຂອງຕົນຕໍ່ຫນ້າຍິງທັງ ໒ ຄົນ ຕ້ອງອາບັຕິສັງຂາທິເສສ ໒ ຕົວ

(໑) ເປັນຍິງ ໒ ຄົນ (໒) ພິກຂຸບໍ່ແນ່ໃຈວ່າເປັນຍິງທັງ ໒ ຄົນ ຯລຯ ສຳຄັນວ່າເປັນກະເທີຍ ຯລຯ ສຳຄັນວ່າເປັນຊາຍ ຯລຯ ສຳຄັນວ່າເປັນສັຕວ໌ເດັຽຣະສານແລະມີຄວາມກຳຫນັດ (໓) ພິກຂຸກ່າວສັຣເສີນການບຳເຣີຄວາມໃຄ່ຂອງຕົນຕໍ່ຫນ້າຍິງທັງ ໒ ຄົນ ຕ້ອງອາບັຕິຖຸລລັຈຈັຍ ໒ ຕົວ

ກະເທີຍ ໒ ຄົນ

(໑) ເປັນກະເທີຍ ໔ ຄົນ (໔) ພິກສຸສຳຄັນວ່າເປັນກະເທີຍທັງ ໔ ຄົນແລະມີຄວາມກຳຫນັດ (໓) ພິກສຸກ່າວສັຣເສີນການບຳເຣີຄວາມໃຄ່ຂອງຕົນຕໍ່ຫນ້າກະເທີຍທັງ ໔ ຄົນ ຕ້ອງອາບັຕິຖຸລລັຈຈັຍ ໔ ຕົວ

(໑) ເປັນກະເທີຍ ໔ ຄົນ (໔) ພິກສຸບໍ່ແນ່ໃຈວ່າເປັນກະເທີຍທັງ ໔ ຄົນ ຯລຯ ສຳຄັນວ່າເປັນຊາຍ ຯລຯ ສຳຄັນວ່າເປັນສັຕວ໌ເດັຽຣະສານ ຯລຯ ສຳຄັນວ່າເປັນຍິງແລະມີຄວາມກຳຫນັດ (໓) ພິກສຸກ່າວສັຣເສີນການບຳເຣີຄວາມໃຄ່ຂອງຕົນຕໍ່ຫນ້າກະເທີຍທັງ ໔ ຄົນ ຕ້ອງອາບັຕິທຸກກຕ ໔ ຕົວ

### ຊາຍ ໔ ຄົນ ແລະສັຕວ໌ເດັຽຣະສານ ໔ ຕົວ

(໑) ເປັນຊາຍ ໔ ຄົນ (໔) ພິກສຸສຳຄັນວ່າເປັນຊາຍທັງ ໔ ຄົນ ຯລຯ (໑) ສັຕວ໌ເດັຽຣະສານ໔ ຕົວ (໔) ພິກສຸສຳຄັນວ່າເປັນສັຕວ໌ເດັຽຣະສານທັງ ໔ ຕົວ ຯລຯ ບໍ່ແນ່ໃຈ ຯລຯ ສຳຄັນວ່າເປັນຍິງ ຯລຯ ສຳຄັນວ່າເປັນກະເທີຍ ຯລຯ ສຳຄັນວ່າເປັນຊາຍແລະມີຄວາມກຳຫນັດ (໓) ພິກສຸກ່າວສັຣເສີນການບຳເຣີຄວາມໃຄ່ຂອງຕົນຕໍ່ຫນ້າສັຕວ໌ເດັຽຣະສານທັງ ໔ ຕ້ອງອາບັຕິທຸກກຕ ໔ ຕົວ

### ຍິງແລະກະເທີຍ

(໑) ເປັນຍິງແລະກະເທີຍ (໔) ພິກສຸສຳຄັນວ່າເປັນຍິງທັງ ໔ ຄົນແລະມີຄວາມກຳຫນັດ (໓) ພິກສຸກ່າວ ສັຣເສີນການບຳເຣີຄວາມໃຄ່ຂອງຕົນຕໍ່ຫນ້າຍິງແລະກະເທີຍທັງ ໔ ຄົນ ຕ້ອງອາບັຕິທຸກກຕກັບສັງຂາທິເສສ

(໑) ເປັນຍິງແລະກະເທີຍ (໔) ພິກສຸບໍ່ແນ່ໃຈວ່າເປັນຍິງແລະກະເທີຍທັງ ໔ ຄົນ ຯລຯ ຕ້ອງອາບັຕິທຸກກຕກັບຖຸລລັຈຈັຍ ຯລຯ ສຳຄັນວ່າເປັນກະເທີຍ ຯລຯ ຕ້ອງອາບັຕິຖຸລລັຈຈັຍ ໔ ຕົວ ຯລຯ ສຳຄັນວ່າເປັນຊາຍ ຯລຯ ສຳຄັນວ່າເປັນສັຕວ໌ເດັຽຣະສານແລະມີຄວາມກຳຫນັດ (໓) ພິກສຸກ່າວສັຣເສີນການບຳເຣີຄວາມໃຄ່ຂອງຕົນຕໍ່ຫນ້າຍິງແລະກະເທີຍທັງ ໔ ຄົນ ຕ້ອງອາບັຕິທຸກກຕກັບຖຸລລັຈຈັຍ

(໑) ເປັນຍິງແລະຊາຍ (໔) ພິກສຸສຳຄັນວ່າເປັນຍິງທັງ ໔ ຄົນແລະມີຄວາມກຳຫນັດ (໓) ພິກສຸກ່າວສັຣເສີນການບຳເຣີຄວາມໃຄ່ຂອງຕົນຕໍ່ຫນ້າຍິງແລະຊາຍທັງ ໔ ຄົນ ຕ້ອງອາບັຕິທຸກກຕກັບ

ສັງຂາທິເສສ
(໑) ເປັນຍິງແລະຊາຍ (໒) ພິກສຸບໍ່ແນ່ໃຈວ່າເປັນຍິງແລະຊາຍທັງ ໒ ຄົນ ຯລຯ ສໍາຄັນວ່າເປັນກະເທີຍ ຯລຯ ສໍາຄັນວ່າເປັນຊາຍ ຯລຯ ສໍາຄັນວ່າເປັນສັຕວ໌ເດັຽຣະສານແລະມີຄວາມກໍາຫນັດ (໓) ພິກສຸກ່າວສັຣເສີນການບໍາເຣີຄວາມໃຄ່ຂອງຕົນຕໍ່ຫນ້າຍິງແລະຊາຍທັງ ໒ ຄົນ ຕ້ອງອາບັຕິທຸກກຕກັບຖຸລລັຈຈັຍ

## ຍິງແລະສັຕວ໌ເດັຽຣະສານ

(໑) ເປັນຍິງແລະສັຕວ໌ເດັຽຣະສານ (໒) ພິກສຸສໍາຄັນວ່າເປັນຍິງທັງ ໒ ແລະມີຄວາມກໍາຫນັດ (໓) ພິກສຸກ່າວສັຣເສີນການບໍາເຣີຄວາມໃຄ່ຂອງຕົນຕໍ່ຫນ້າຍິງແລະສັຕວ໌ເດັຽຣະສານທັງ ໒ ຕ້ອງອາບັຕິທຸກກຕແລະສັງຂາທິເສສ
(໑) ເປັນຍິງແລະສັຕວ໌ເດັຽຣະສານ (໒) ພິກສຸບໍ່ແນ່ໃຈວ່າເປັນຍິງແລະສັຕວ໌ເດັຽຣະສານທັງ ໒ ຯລຯ ສໍາຄັນວ່າເປັນກະເທີຍ ຯລຯ ສໍາຄັນວ່າເປັນຊາຍ ຯລຯ ສໍາຄັນວ່າເປັນສັຕວ໌ເດັຽຣະສານ ແລະມີຄວາມກໍາຫນັດ (໓) ພິກສຸກ່າວສັຣເສີນການບໍາເຣີຄວາມໃຄ່ຂອງຕົນຕໍ່ຫນ້າຍິງແລະສັຕວ໌ເດັຽຣະສານທັງ ໒ ຕ້ອງອາບັຕິທຸກກຕກັບຖຸລລັຈຈັຍ

## ກະເທີຍແລະຊາຍ

(໑) ເປັນກະເທີຍແລະຊາຍ (໒) ພິກສຸສໍາຄັນວ່າເປັນກະເທີຍທັງ ໒ ຄົນແລະມີຄວາມກໍາຫນັດ (໓) ພິກສຸກ່າວສັຣເສີນການບໍາເຣີຄວາມໃຄ່ຂອງຕົນຕໍ່ຫນ້າກະເທີຍແລະຊາຍທັງ ໒ ຄົນ ຕ້ອງອາບັຕິທຸກກຕກັບຖຸລລັຈຈັຍ
(໑) ເປັນກະເທີຍແລະຊາຍ (໒) ພິກສຸບໍ່ແນ່ໃຈວ່າເປັນກະເທີຍແລະຊາຍທັງ ໒ ຄົນ ຯລຯ ສໍາຄັນວ່າເປັນຊາຍ ຯລຯ ສໍາຄັນວ່າເປັນສັຕວ໌ເດັຽຣະສານ ຯລຯ ສໍາຄັນວ່າເປັນຍິງແລະມີຄວາມກໍາຫນັດ (໓) ພິກສຸກ່າວສັຣເສີນການບໍາເຣີຄວາມໃຄ່ຂອງຕົນຕໍ່ຫນ້າກະເທີຍແລະຊາຍທັງ ໒ ຄົນ ຕ້ອງອາບັຕິທຸກກຕ ໒ ຕົວ

## ກະເທີຍແລະສັຕວ໌ເດັຽຣະສານ

(໑) ເປັນກະເທີຍແລະສັຕວ໌ເດັຽຣະສານ (໒) ພິກສຸສຳຄັນວ່າເປັນກະເທີຍທັງ ໒ ແລະມີຄວາມກຳຫນັດ (໓) ພິກສຸກ່າວສັຣເສີນກາຣບຳເຣີຄວາມໃຄ່ຂອງຕົນຕໍ່ຫນ້າກະເທີຍແລະສັຕວ໌ເດັຽຣະສານທັງ ໒ ຕ້ອງອາບັຕິທຸກກຕກັບຖຸລລັຈຈັຍ

(໑) ເປັນກະເທີຍແລະສັຕວ໌ເດັຽຣະສານ (໒) ພິກສຸບໍ່ແນ່ໃຈວ່າເປັນກະເທີຍແລະສັຕວ໌ເດັຽຣະສານທັງ ໒ ຯລຯ ສຳຄັນວ່າເປັນຊາຍ ຯລຯ ສຳຄັນວ່າເປັນສັຕວ໌ເດັຽຣະສານ ຯລຯ ສຳຄັນວ່າເປັນຍິງ ແລະມີຄວາມກຳຫນັດ (໓) ພິກສຸກ່າວສັຣເສີນກາຣບຳເຣີຄວາມໃຄ່ຂອງຕົນຕໍ່ຫນ້າກະເທີຍແລະສັຕວ໌ເດັຽຣະສານທັງ ໒ ຕ້ອງອາບັຕິທຸກກຕ ໒ ຕົວ

(໑) ເປັນຊາຍແລະສັຕວ໌ເດັຽຣະສານ (໒) ພິກສຸສຳຄັນວ່າເປັນຊາຍທັງ ໒ ຯລຯ ພິກສຸບໍ່ແນ່ໃຈວ່າເປັນຊາຍແລະສັຕວ໌ເດັຽຣະສານ ຯລຯ ສຳຄັນວ່າເປັນສັຕວ໌ເດັຽຣະສານ ຯລຯ ສຳຄັນວ່າເປັນຍິງ ຯລຯ ສຳຄັນວ່າເປັນກະເທີຍແລະມີຄວາມກຳຫນັດ (໓) ພິກສຸກ່າວສັຣເສີນກາຣບຳເຣີຄວາມໃຄ່ຂອງຕົນຕໍ່ຫນ້າຊາຍແລະສັຕວ໌ເດັຽຣະສານທັງ ໒ ຕ້ອງອາບັຕິທຸກກຕ ໒ ຕົວ

## ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໒໘໒] ໑. ພິກສຸຜູ້ກ່າວວ່າ "ຈົ່ງບຳຣຸງດ້ວຍຈີວອນ ບິນທບາຕ ເສນາສນະ ແລະບໍຣິຂາຣຄີຢາຮັກສາໂຣຄ"

໒. ພິກສຸວິກົລຈິຕ

໓. ພິກສຸຕົ້ນບັນຍັຕ

## ຄາຖາຣວມວິນີຕວັຕຖຸ
## ເຣື້ອງທີ່ຊີ້ງວິນິສັຍແລ້ວ

ເຣື້ອງຍິງຫມັນຕ້ອງກາຣມີບຸຕຣ ໑ ເຣື້ອງ
ເຣື້ອງຍິງຜູ້ມີບຸຕຣຖີ່ບໍ່ຕ້ອງກາຣມີບຸຕຣ ໑ ເຣື້ອງ
ເຣື້ອງຍິງຕ້ອງກາຣເປັນທີ່ຮັກຂອງສາມີ ໑ ເຣື້ອງ
ເຣື້ອງຍິງຕ້ອງກາຣມີໂຊຄ ໑ ເຣື້ອງ
ເຣື້ອງຍິງຕ້ອງກາຣຖວາຍທານອັນເລີສ ໑ ເຣື້ອງ

ເລື້ອງຍິງຕ້ອງການອຸປັຕຖາກດ້ວຍສິ່ງທີ່ເລີສ ໑ ເລື້ອງ
ເລື້ອງຍິງຕ້ອງການໄປສຸຄຕິ ໑ ເລື້ອງ

ວິນີຕວັຕຖຸ
ເລື້ອງຍິງຫມັນຕ້ອງການມີບຸຕຣ ໑ ເລື້ອງ

[໔໒໕] ສມັຍນັ້ນ ຍິງຫມັນຄົນນຶ່ງຖາມພິກສຸທີ່ນາງອຸປຖັມພ໌ວ່າ "ພຣະຄຸນເຈົ້າ ເຮັດຢ່າງໃດຂະນ້ອຍຈຶ່ງຈະມີບຸຕຣ" ພິກສຸຕອບວ່າ "ນ້ອງຍິງ ຖ້າເຊັ່ນນັ້ນທ່ານຈົ່ງຖວາຍທານອັນເລີສ" "ພຣະຄຸນເຈົ້າ ແມ່ນຫຍັງທີ່ຊື່ວ່າທານອັນເລີສ" "ເມຖຸນທັມ" ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິສັງຂາທິເສສຫລືບໍ່ ຈຶ່ງນຳເລື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິສັງຂາທິເສສ" (ເລື້ອງທີ ໑)

ເລື້ອງຍິງຜູ້ມີບຸຕຣທີ່ບໍ່ຕ້ອງການມີບຸຕຣ ໑ ເລື້ອງ

ສມັຍນັ້ນ ຍິງຄົນນຶ່ງມີບຸຕຣຖີ່ຈຶ່ງຖາມພິກສຸທີ່ນາງອຸປຖັມພ໌ວ່າ "ພຣະຄຸນເຈົ້າ ເຮັດຢ່າງໃດຂະນ້ອຍຈຶ່ງຈະບໍ່ມີບຸຕຣ" "ນ້ອງຍິງ ຖ້າຢ່າງນັ້ນທ່ານຈົ່ງຖວາຍທານອັນເລີສ" "ພຣະຄຸນເຈົ້າ ແມ່ນຫຍັງຊື່ວ່າທານອັນເລີສ" "ເມຖຸນທັມ" ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິສັງຂາທິເສສຫລືບໍ່ ຈຶ່ງນຳເລື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິສັງຂາທິເສສ" (ເລື້ອງທີ ໔)

ເລື້ອງຍິງຕ້ອງການເປັນທີ່ຮັກຂອງສາມີ ໑ ເລື້ອງ

ສມັຍນັ້ນ ຍິງຄົນນຶ່ງຖາມພິກສຸທີ່ນາງອຸປຖັມພ໌ວ່າ "ພຣະຄຸນເຈົ້າ ເຮັດຢ່າງໃດຂະນ້ອຍຈຶ່ງຈະເປັນທີ່ຮັກຂອງສາມີ" "ນ້ອງຍິງ ຖ້າຢ່າງນັ້ນທ່ານຈົ່ງຖວາຍທານອັນເລີສ" "ພຣະຄຸນເຈົ້າ ແມ່ນຫຍັງຊື່ວ່າທານອັນເລີສ" "ເມຖຸນທັມ" ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິສັງຂາທິເສສຫລືບໍ່ ຈຶ່ງນຳເລື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິສັງຂາທິເສສ" (ເລື້ອງທີ ៣)

ເລື້ອງຍິງຕ້ອງການມີໂຊຄ ໑ ເລື້ອງ

ສມັຍນັ້ນ ຍິງຄົນນຶ່ງຖາມພິກສຸທີ່ນາງອຸປຖັມພ໌ວ່າ "ພຣະຄຸນເຈົ້າ ເຮັດຢ່າງໃດຂະນ້ອຍຈຶ່ງຈະມີໄຊຄ" "ນ້ອງຍິງ ຖ້າຢ່າງນັ້ນທ່ານຈົ່ງຖວາຍທານອັນເລີສ" "ພຣະຄຸນເຈົ້າແມ່ນຫຍັງຊື່ວ່າທານອັນເລີສ" "ເມຖຸນທັມ" ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິສັງຂາທິເສສຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງ ຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິສັງຂາທິເສສ" (ເຣື້ອງທີ ໔)

## ເຣື້ອງຍິງຕ້ອງການຖວາຍທານອັນເລີສ ໑ ເຣື້ອງ

ສມັຍນັ້ນ ຍິງຄົນນຶ່ງຖາມພິກສຸທີ່ນາງອຸປຖັມພ໌ວ່າ "ພຣະຄຸນເຈົ້າ ຂະນ້ອຍຈະຖວາຍຫຍັງດີແກ່ພຣະຄຸນເຈົ້າ" "ນ້ອງຍິງ ຖ້າຢ່າງນັ້ນທ່ານຈົ່ງຖວາຍທານອັນເລີສ" "ພຣະຄຸນເຈົ້າ ແມ່ນຫຍັງຊື່ວ່າທານອັນເລີສ" "ເມຖຸນທັມ" ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິສັງຂາທິເສສຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິສັງຂາທິເສສ" (ເຣື້ອງທີ ໕)

## ເຣື້ອງຍິງຕ້ອງການອຸປັຕຖາກດ້ວຍສິ່ງທີ່ເລີສ ໑ ເຣື້ອງ

ສມັຍນັ້ນ ຍິງຄົນນຶ່ງຖາມພິກສຸທີ່ນາງອຸປຖັມພ໌ວ່າ "ພຣະຄຸນເຈົ້າ ຂະນ້ອຍຈະອຸປັຕຖາກພຣະຄຸນເຈົ້າດ້ວຍຫຍັງດີ" "ນ້ອງຍິງ ດ້ວຍທານອັນເລີສ" "ພຣະຄຸນເຈົ້າ ແມ່ນຫຍັງຊື່ວ່າທານອັນເລີສ" "ເມຖຸນທັມ" ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິສັງຂາທິເສສຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸ ທ່ານຕ້ອງອາບັຕິສັງຂາທິເສສ" (ເຣື້ອງທີ ໖)

## ເຣື້ອງຍິງຕ້ອງການໄປສຸຄຕິ ໑ ເຣື້ອງ

ສມັຍນັ້ນ ຍິງຄົນນຶ່ງຖາມພິກສຸທີ່ນາງອຸປຖັມພ໌ວ່າ "ພຣະຄຸນເຈົ້າ ຂະນ້ອຍຈະໄປສຸຄຕິໄດ້ຢ່າງໃດ" "ນ້ອງຍິງ ຖ້າຢ່າງນັ້ນ ທ່ານຈົ່ງຖວາຍທານອັນເລີສ" "ພຣະຄຸນເຈົ້າ ແມ່ນຫຍັງຊື່ວ່າທານອັນເລີສ" "ເມຖຸນທັມ" ທ່ານເກີດຄວາມກັງວົລໃຈວ່າ ເຮົາຕ້ອງອາບັຕິສັງຂາທິເສສຫລືບໍ່ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ ຊົງຊາບ ພຣະອົງຄ໌ຕຣັສວ່າ "ພິກສຸທ່ານຕ້ອງອາບັຕິສັງຂາທິເສສ" (ເຣື້ອງທີ ໗)

ອັຕຕການປາຣິຈຣິຍສິກຂາບົທທີ ໔ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ສັງຂາທິເສສກັນຫ໌] ໕. ສັຍຈຣິຕຕສິກຂາບົທ ນິທານວັຕຖຸ

໕. ສັຍຈຣິຕຕສິກຂາບົທ

ວ່າດ້ວຍການຊັກສື່

ເຣື່ອງພຣະອຸທາຍີ

[໔໙໕] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຮາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ທ່ານພຣະອຸທາຍີເປັນພຣະທີ່ໄກ້ຊິດຕະກູນໃນກຸງສາວັຕຖີ ໄປມາຫາສູ່ຕະກູນເປັນອັນມາກທີ່ຕົນເຫັນວ່າມີເດັກຫນຸ່ມທີ່ຍັງບໍ່ມີພັຣຍາຫລືເດັກສາວທີ່ຍັງບໍ່ມີສາມີ ກ່າວຍົກຍ້ອງຄຸນສົມບັຕຂອງເດັກສາວໃຫ້ມາຣດາບິດາຂອງເດັກຫນຸ່ມຟັງວ່າ “ສາວນ້ອຍຂອງຕະກູນພຸ້ນ ຮູບງາມ ຫນ້າເບິ່ງ ຫນ້າຊົມ ສລາດຫລັກແຫລມໄຫວພິບດີ ດຸຫມັ່ນບໍ່ກຽດຄ້ານ ສາວນ້ອຍຄົນນັ້ນເຫມາະສົມກັບຊາຍຫນຸ່ມຄົນນີ້” ມາຣດາບິດາຂອງເດັກຫນຸ່ມກໍກ່າວວ່າ “ພຣະຄຸນເຈົ້າ ຄົນເຫລົ່ານັ້ນບໍ່ຮູ້ຈັກພວກເຮົາວ່າ‘ເປັນໃຜຫລືພັກພວກຂອງໃຜ’ ຖ້າພຣະຄຸນເຈົ້າຈະເວົ້າທາບທາມໃຫ້ ພວກເຮົາກໍຈະສູ່ຂໍເດັກສາວນັ້ນມາໃຫ້ເດັກຫນຸ່ມຄົນນີ້” ພຣະອຸທາຍີນັ້ນໄປກ່າວຍົກຍ້ອງຄຸນສົມບັຕຂອງເດັກຫນຸ່ມໃຫ້ມາຣດາບິດາຂອງເດັກສາວຟັງວ່າ “ຊາຍຫນຸ່ມຂອງຕະກູນພຸ້ນ ຮູບງາມ ຫນ້າເບິ່ງ ຫນ້າຊົມ ສລາດຫລັກແຫລມໄຫວພິບດີ ດຸຫມັ່ນບໍ່ກຽດຄ້ານ ຊາຍຫນຸ່ມຄົນນັ້ນເຫມາະສົມກັບສາວນ້ອຍຄົນນີ້” ຂ້າງມາຣດາບິດາຂອງເດັກສາວກໍກ່າວວ່າ “ພຣະຄຸນເຈົ້າ ຄົນເຫລົ່ານັ້ນບໍ່ຮູ້ຈັກພວກເຮົາວ່າ ‘ເປັນໃຜຫລືພັກພວກຂອງໃຜ’ ການທີ່ຈະເວົ້າຍໍສາວນ້ອຍໃຫ້ເຂົາກະບໍ່ຄືປານໃດ ຖ້າພຣະຄຸນເຈົ້າຊ່ອຍໄປເວົ້າໃຫ້ເຂົາມາສູ່ຂໍ ພວກຂ້າພະເຈົ້າກໍຈະຍົກສາວນ້ອຍຄົນນີ້ໃຫ້ຊາຍຫນຸ່ມຄົນນັ້ນ” ດ້ວຍວິທີຢ່າງນີ້ ພຣະອຸທາຍີຈຶ່ງໃຫ້ມາຣດາບິດາຂອງຫນຸ່ມສາວທຳອາວາຫມົງຄົລແດ່ ວິວາຫມົງຄົລແດ່ ຫລືຊັກນຳໃຫ້ສູ່ຂຫມັ້ນຫມາຍກັນແດ່

[໔໙໖] ສມັຍນັ້ນ ບຸຕຣສາວຂອງແມ່ຫມ້າຍຜູ້ເຄີຍເປັນພັຣຍາໂຫຣຄົນນຶ່ງ ມີຮູບງາມ ຫນ້າເບິ່ງ ຫນ້າຊົມ ພວກສາວົກອາຊີວກຈາກຫມູ່ບ້ານອື່ນມາບອກພັຣຍາໂຫຣນັ້ນວ່າ “ແມ່ຄຸນ ທ່ານຈົ່ງຍົກເດັກສາວຄົນນີ້ ໃຫ້ຊາຍຫນຸ່ມຂອງພວກເຮົາເຖີດ” ພັຣຍາໂຫຣຕອບວ່າ “ຂະນ້ອຍບໍ່ຮູ້ວ່າພວກທ່ານເປັນໃຜຫລືເປັນພັກພວກຂອງ

ໃຜ ອີກປະການນຶ່ງ ເດັກສາວຄົນນີ້ເປັນບຸຕຣສາວຄົນດຽວຂອງຂະນ້ອຍ ນາງຕ້ອງໄປຢູ່ບ້ານອື່ນ ຂະນ້ອຍຍົກໃຫ້ບໍ່ໄດ້" ຊາວບ້ານກ່າວກັບພວກສາວົກອາຊີວກວ່າ "ພຣະຄຸນເຈົ້າ ພວກທ່ານມາທຸຣະຫຍັງກັນ" ພວກສາວົກອາຊີວກຕອບວ່າ "ພວກເຮົາມາຂໍບຸຕຣສາວກະພັຣຍາໂຫຣຊື່ອພຸ້ນໃນທີ່ນີ້ໃຫ້ແກ່ເດັກຫນຸ່ມຂອງພວກເຮົາ ແຕ່ນາງປຕິເສທວ່າ 'ຂະນ້ອຍບໍ່ຮູ້ວ່າພວກທ່ານເປັນໃຜ ฯລฯ ຂະນ້ອຍຍົກໃຫ້ບໍ່ໄດ້" ຊາວບ້ານແນະນຳວ່າ "ພຣະຄຸນເຈົ້າໄປຂໍຍິງສາວກັບພັຣຍາໂຫຣເຮັດຫຍັງກັນ ໄປເວົ້າກັບພຣະອຸທາຍີບໍ່ດີກວ່າຫລື ພຣະອຸທາຍີຊ່ວຍໃຫ້ເຂົາຍິນຍອມຍົກໃຫ້ໄດ້" ພວກສາວົກອາຊີວກໄປຫາທ່ານພຣະອຸທາຍີເຖິງທີ່ຢູ່ ຄັນເຖິງແລ້ວ ໄດ້ກ່າວວ່າ "ພຣະຄຸນທ່ານ ພວກຜູ້ຂ້າມາຂໍບຸຕຣສາວກັບພັຣຍາໂຫຣໃນທີ່ນີ້ໃຫ້ແກ່ຊາຍຫນຸ່ມຂອງພວກຜູ້ຂ້າ ແຕ່ຖືກນາງປຕິເສທວ່າ 'ຂະນ້ອຍບໍ່ຮູ້ວ່າພວກທ່ານເປັນໃຜ ฯລฯ ຂະນ້ອຍຍົກໃຫ້ບໍ່ໄດ້' ພຣະຄຸນທ່ານຊ່ວຍດ້ວຍເຖີດຂະນ້ອຍ ຊ່ວຍເວົ້າໃຫ້ພັຣຍາໂຫຣຍອມຍົກບຸຕຣສາວໃຫ້ແກ່ຊາຍຫນຸ່ມຂອງພວກຜູ້ຂ້າດ້ວຍ" ລຳດັບນັ້ນທ່ານພຣະອຸທາຍີຈຶ່ງເຂົ້າໄປຫາພັຣຍາໂຫຣເຖິງທີ່ຢູ່ ຄັນເຖິງແລ້ວ ໄດ້ຖາມວ່າ "ເປັນຫຍັງ ທ່ານບໍ່ຍົກບຸຕຣ ສາວໃຫ້ຄົນເຫລົ່ານີ້ລະ" ພັຣຍາໂຫຣຕອບວ່າ "ຂະນ້ອຍບໍ່ຮູ້ວ່າຄົນເຫລົ່ານີ້ເປັນໃຜຫລືເປັນພັກພວກຂອງໃຜ ອີກປະການນຶ່ງ ຍິງສາວນີ້ເປັນບຸຕຣສາວຄົນດຽວຂອງຂະນ້ອຍ ນາງຕ້ອງໄປຢູ່ບ້ານອື່ນ ຂະນ້ອຍຈຶ່ງບໍ່ຍົກໃຫ້ ຂະນ້ອຍ" "ທ່ານຈົ່ງຍົກໃຫ້ໄປເຖີດ ອາຕມາຮູ້ຈັກຄົນພວກນີ້ດີ" "ຖ້າພຣະຄຸນເຈົ້າຮູ້ຈັກ ຂະນ້ອຍກໍຈະຍົກໃຫ້" ຕໍ່ມາ ພັຣຍາໂຫຣຈຶ່ງຍົກບຸຕຣສາວໃຫ້ສາວົກອາຊີວກ ຄັນພວກເຂົາພາຍິງສາວໄປ ໄດ້ລ້ຽງດູຢ່າງລູກໃພ້ ເດືອນດຽວເທົ່ານັ້ນ ຕໍ່ຈາກນັ້ນລ້ຽງດູຢ່າງທາສຍິງ

ຕໍ່ມາ ສາວນ້ອຍສົ່ງຂ່າວໄປເຖິງມາຣດາວ່າ "ລູກຕົກຣະກຳລຳບາກ ຫາຄວາມສຸຂບໍ່ໄດ້ເລີຍ ພວກເຂົາລ້ຽງດູລູກໃນຖານະລູກໃພ້ຍິງເດືອນດຽວເທົ່ານັ້ນ ຕໍ່ຈາກນັ້ນລ້ຽງດູຢ່າງທາສຍິງ ຍາແມ່ໄປດມາຮັບລູກກັບໄປເຖີດ"

ຄັນຊາບຂ່າວ ພັຣຍາໂຫຣຈຶ່ງໄປຫາພວກສາວົກອາຊີວກເຖິງທີ່ຢູ່ ກ່າວວ່າ "ພວກທ່ານຢ່າລ້ຽງດູສາວນ້ອຍຢ່າງທາສຍິງ ໂປດລ້ຽງດູຢ່າງລູກໃພ້ເຖີດ" ພວກສາວົກອາຊີວກຕອບວ່າ "ພວກເຮົາບໍ່ໄດ້ຮັບຮອງແລະຕົກລົງໄວ້ກັບທ່ານ ແຕ່ຮັບຮອງແລະຕົກລົງໄວ້ກັບພຣະຕ່າງຫາກ ຫລີກໄປ ພວກເຮົາບໍ່ຮູ້ຈັກທ່ານ"

ຄັນພັຣຍາໂຫຣຖືກພວກສາວົກອາຊີວກເວົ້າຮຸກຮານຈຶ່ງເດີນທາງກັບກຸງສາວັຕຖີ ຝ່າຍສາວນ້ອຍກໍຍັງສົ່ງຂ່າວໄປເຖິງມາຣດາອີກເປັນຄັ້ງທີ ๔ ວ່າ "ລູກຕົກຣະກຳລຳບາກ ຫາຄວາມສຸຂບໍ່ໄດ້ເລີຍ ฯລฯ ຍາແມ່ໂປດມາຮັບລູກກັບໄປເຖີດ" ພັຣຍາໂຫຣຈຶ່ງໄປຫາພຣະອຸທາຍີເຖິງທີ່ຢູ່ແລ້ວກ່າວວ່າ

"ພຣະຄຸນເຈົ້າ ຊາບມາວ່າບຸຕຣສາວຂອງຂະນ້ອຍຕົກຣະກຳລຳບາກ ບໍ່ໄດ້ຄວາມສຸຂ ໄດ້ຮັບການລັງງ ດູຢ່າງລູກໃພ້ ເດືອນດງວເທົ່ານັ້ນ ຈາກນັ້ນ ຖືກລັງງດູຢ່າງທາສຍິງ ພຣະຄຸນເຈົ້າຄວຣຂໍຮ້ອງວ່າ ຢ່າລັງງດູສາວນ້ອຍຢ່າງທາສຍິງ ໂປດລັງງດູຢ່າງລູກໃພ້"

ຕໍ່ມາພຣະອຸທາຍີໄດ້ໄປຫາພວກສາວົກອາຊີວກເຖິງທີ່ຢູ່ຂໍຮ້ອງວ່າ "ພວກທ່ານຢ່າລັງງດູສາວ ນ້ອຍຢ່າງທາສຍິງ ໂປດລັງງດູຢ່າງລູກໃພ້ເຖີດ" ພວກສາວົກອາຊີວກຕອບວ່າ "ພວກເຮົາບໍ່ໄດ້ ຮັບຮອງແລະຕົກລົງໄວ້ກັບທ່ານ ແຕ່ຮັບຮອງແລະຕົກລົງໄວ້ກັບພັຣຍາໂຫຣຕ່າງຫາກ ພຣະຕ້ອງບໍ່ ວຸ່ນວາຍ ຕ້ອງເປັນພຣະທີ່ດີ ຫລີກໄປ ພວກເຮົາບໍ່ຮູ້ຈັກທ່ານ" ຄັນຖືກພວກສາວົກອາຊີວກເວົ້າຮຸ ກຮານ ພຣະອຸທາຍີ ຈຶ່ງເດີນທາງກັບກຸງສາວັຕຖີ ຝ່າຍສາວນ້ອຍກໍຍັງສົ່ງຂ່າວໄປເຖິງມາຣດາອີກ ເປັນຄັ້ງທີ ໓ ວ່າ "ລູກຕົກຣະກຳລຳບາກ ຫາຄວາມສຸຂບໍ່ໄດ້ເລີຍ ຯລຯ ຍາແມ່ໂປດມາຮັບລູກກັບ ໄປເຖີດ" ຝ່າຍພັຣຍາໂຫຣກໍເຂົ້າໄປຫາພຣະອຸທາຍີເຖິງທີ່ຢູ່ ແລ້ວເວົ້າເປັນຄັ້ງທີ ໔ ວ່າ "ພຣະຄຸນ ເຈົ້າ ຊາບມາວ່າ ບຸຕຣສາວຂອງຂະນ້ອຍຕກຣະກຳລຳບາກ ຯລຯ ໂປດລັງງດູນາງຢ່າງລູກໃພ້" ທ່ານ ພຣະອຸທາຍີກ່າວວ່າ "ອາຕມາຖືກພວກສາວົກອາຊີວກເວົ້າຮຸກຮານມາຄັ້ງນຶ່ງແລ້ວ ທ່ານໄປເອງເຖີດ ອາຕມາຈະບໍ່ໄປ"

## ນິນທາແລະສັຣເສີນພຣະອຸທາຍີ

[໔ລກ] ຄັ້ງນັ້ນ ພັຣຍາໂຫຣໄດ້ຕຳຫນິ ປະນາມ ໂພນທະນາວ່າ "ຂໍໃຫ້ພຣະອຸທາຍີຕົກຣະກຳ ລຳບາກ ຢ່າໄດ້ມີຄວາມສຸຂສະບາຍເຫມືອນບຸຕຣສາວຂອງເຮົາທີ່ຕ້ອງຕົກຣະກຳລຳບາກບໍ່ໄດ້ ຄວາມສຸຂສະບາຍເພາະມີແມ່ຍ່າ ພໍ່ປູ່ ແລະສາມີຊົ່ວ" ແມ່ສາວນ້ອຍກໍຕຳຫນິ ປະນາມ ໂພນທະນາ ພຣະອຸທາຍີວ່າ "ຂໍໃຫ້ພຣະອຸທາຍີຕົກຣະກຳລຳບາກ ຢ່າໄດ້ມີຄວາມສຸຂ ເຫມືອນເຮົາທີ່ຕ້ອງຕົກຣະ ກຳລຳບາກ ບໍ່ໄດ້ຄວາມສຸຂສະບາຍເພາະມີແມ່ຍ່າ ພໍ່ປູ່ ແລະ ສາມີຊົ່ວ" ແມ່ນແຕ່ຍິງສາວອື່ນໆ ທີ່ບໍ່ ຊອບໃຈແມ່ຍ່າ ພໍ່ປູ່ ແລະສາມີ ຕ່າງສາບແຊ່ງພຣະອຸທາຍີ ວ່າ "ຂໍໃຫ້ພຣະອຸທາຍີຕົກຣະກຳລຳບາກ ຯລຯ ເຫມືອນເຮົາທີ່ຕົກຣະກຳລຳບາກ ເພາະມີແມ່ຍ່າ ພໍ່ຜົວ ແລະສາມີຊົ່ວ" ຝ່າຍຍິງສາວທີ່ຊອບ ໃຈແມ່ຍ່າ ພໍ່ປູ່ ແລະສາມີ ຕ່າງໃຫ້ພອນວ່າ "ຂໍໃຫ້ພຣະຄຸນເຈົ້າອຸທາຍີຈົ່ງມີຄວາມສຸຂ ຄວາມ ຈະເຣີນເຫມືອນພວກເຮົາທີ່ມີຄວາມສຸຂຄວາມຈະເຣີນເພາະມີແມ່ຍ່າ ພໍ່ປູ່ ແລະສາມີດີ" ພວກພິກສຸ ໄດ້ຍິນຍິງບາງພວກສາບແຊ່ງ ບາງພວກໃຫ້ພອນ ບັນດາພິກສຸຜູ້ມັກນ້ອຍສັນໂດສ ຯລຯ ຈຶ່ງພາ ກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດທ່ານພຣະອຸທາຍີຈຶ່ງຊັກສື່ລະ" ຄັນພິກສຸເຫລົ່ານັ້ນຕຳຫນິ ທ່ານພຣະອຸທາຍີໂດຍປະການຕ່າງໆ ແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

## ຊົງປະຊຸມສົງຂ໌ບັນຍັຕສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຣັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະອຸທາຍີວ່າ "ອຸທາຍີ ຊາບວ່າ ທ່ານຊັກສື່ແມ່ນແທ້ບໍ" ທ່ານທູລຣັບວ່າ "ແມ່ນແທ້ ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ໂມຂບຸຣຸສ ກາຣກະທຳຢ່າງນີ້ບໍ່ສົມຄວຣ ບໍ່ຄ້ອຍຕາມ ບໍ່ເຫມາະສົມ ບໍ່ແມ່ນກິຈຂອງສມນະ ໃຊ້ບໍ່ໄດ້ ບໍ່ຄວຣທຳ ໂມຂບຸຣຸສ ຈັ່ງໃດທ່ານຈຶ່ງຊັກສື່ລະ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ແລ້ວຈຶ່ງຣັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

## ພຣະບັນຍັຕ

[໔໙໙] ກໍ ພິກສຸໃດທຳຫນ້າທີ່ຊັກສື່ ຄື ບອກຄວາມປະສົງຄ໌ຂອງຊາຍແກ່ຍິງກໍດີ ບອກຄວາມປະສົງຄ໌ຂອງຍິງແກ່ຊາຍກໍດີ ເພື່ອໃຫ້ເປັນພັຣຍາຫລືເປັນຊູ້ຮັກ ເປັນສັງຂາທິເສສ ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັຕໄວ້ແກ່ພິກສຸທັງຫລາຍຢ່າງນີ້

## ເຣື້ອງພຣະອຸທາຍີ ຈົບ

## ເຣື້ອງນັກເລງຍິງ

[໕໐໐] ສມັຍນັ້ນ ພວກນັກເລງຈຳນວນຫລາຍພາກັນໄປທ່ຽວມ່ວນຊື່ນໃນອຸທຍານ ສົ່ງຊາຍສື່ໄປສຳນັກຍິງແພສຍາຄົນນຶ່ງດ້ວຍສັ່ງວ່າ "ເຊີນນາງມາເຖີດ ພວກເຮົາຈັກໄປທ່ຽວມ່ວນຊື່ນໃນອຸທຍານດ້ວຍກັນ" ຍິງແພສຍາຕອບວ່າ "ນາຍເອີຍ ຂະນ້ອຍບໍ່ຮູ້ວ່າພວກທ່ານເປັນໃຜຫລືເປັນພັກພວກຂອງໃຜ ອີກປະກາຣນຶ່ງ ຂະນ້ອຍມີຊັພຍ໌ສົມບັຕຫລາຍ ມີເຄື່ອງປະດັບມາກມາຍ ຖ້າຈະຕ້ອງອອກໄປນອກເມືອງ ຂະນ້ອຍບໍ່ໄປ" ຄັນແລ້ວຊາຍສື່ແຈ້ງເຣື້ອງນັ້ນໃຫ້ພວກນັກເລງຊາບ ເມື່ອຊາຍສື່ເວົ້າຢ່າງນັ້ນ ຊາຍອີກຄົນນຶ່ງບອກພວກນັກເລງວ່າ "ພວກທ່ານໄປອ້ອນວອນຍິງແພສຍາເປັນຫຍັງ ຄວຣບອກພຣະອຸທາຍີບໍ່ດີກວ່າບໍ ທ່ານຈະສົ່ງນາງມາໃຫ້ພວກເຮົາເອງ" ເມື່ອເຂົາເວົ້າຢ່າງນັ້ນອຸບາສິກຄົນນຶ່ງເວົ້າແຍ້ງວ່າ "ທ່ານຢ່າເວົ້າຢ່າງນັ້ນ ກາຣເຮັດຢ່າງນັ້ນບໍ່ເຫມາະແກ່ພຣະສມນະເຊື້ອ

ສາຍສຸກາຍບຸດຣ ພຣະຄຸນເຈົ້າອຸທາຍີຈະບໍ່ທຳເຊັ່ນນັ້ນ" ເມື່ອອຸບາສິກເວົ້າຢ່າງນີ້ ພວກນັກເລງຈຶ່ງພົນັນກັນວ່າ "ພຣະຄຸນເຈົ້າອຸທາຍີຈະທຳຫລືບໍ່ທຳ" ນັກເລງເຫລົ່ານັ້ນເຂົ້າໄປຫາພຣະອຸທາຍີເຖິງທີ່ຢູ່ແລ້ວຂາບຮຽນທ່ານວ່າ "ພຣະຄຸນເຈົ້າ ພວກຜູ້ຂ້າເຂົ້າໄປທ່ຽວມ່ວນຊື່ນໃນອຸທຍານ ສົ່ງຊາຍສື່ໄປຫາຍິງແພສຍາ ຊື່ພຸ້ນວ່າ 'ຂໍໃຫ້ນາງມາ ພວກເຮົາຈະທ່ຽວມ່ວນຊື່ນໃນອຸທຍານ' ນາງຕອບວ່າ 'ນາຍເອີຍ ຂະນ້ອຍບໍ່ຊາບວ່າພວກທ່ານເປັນໃຜຫລືເປັນພັກພວກຂອງໃຜ ອີກປະການນຶ່ງ ຂະນ້ອຍມີເຄື່ອງປະດັບຫລາຍ ຖ້າຈະຕ້ອງອອກໄປນອກເມືອງ ຂະນ້ອຍບໍ່ໄປ' ຂໍພຣະຄຸນເຈົ້າໂປດສົ່ງຍິງແພສຍາຄົນນັ້ນມາໃຫ້ພວກຜູ້ຂ້າດ້ອຍເຖີດ"

ລຳດັບນັ້ນ ພຣະອຸທາຍີເຂົ້າໄປຫາຍິງແພສຍາເຖິງທີ່ຢູ່ຖາມວ່າ "ເປັນຫຍັງທ່ານບໍ່ໄປຫາຄົນພວກນັ້ນລະ"

ນາງຕອບວ່າ "ຂະນ້ອຍບໍ່ຮູ້ວ່າ ຄົນພວກນີ້ເປັນໃຜຫລືເປັນພັກພວກຂອງໃຜ ອີກປະການນຶ່ງຂະນ້ອຍມີຊັພຍ໌ສົມ ບັດຫລາຍ ມີເຄື່ອງປະດັບມາກ ຖ້າຈະຕ້ອງອອກໄປນອກເມືອງ ຂະນ້ອຍບໍ່ໄປ ຂະນ້ອຍ" "ທ່ານໄປຫາຄົນພວກນີ້ເຖີດ ອາຕມາຮູ້ຈັກພວກເຂົາດີ" "ຖ້າພຣະຄຸນເຈົ້າຮູ້ຈັກ ຂະນ້ອຍກໍຈະໄປ ຂະນ້ອຍ" ລຳດັບນັ້ນ ພວກນັກເລງພາຍິງແພສຍາຄົນນັ້ນໄປທ່ຽວໃນອຸທຍານ ຕໍ່ມາ ອຸບາສິກຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະອຸທາຍີຈຶ່ງຊັກສື່ໃຫ້ຢູ່ຮ່ວມກັນຊົ່ວຄາວລະ" ພວກພິກສຸໄດ້ຍິນອຸບາສິກຕຳໜິ ປະນາມ ໂພນ ທະນາ ບັນດາພິກສຸຜູ້ມັກນ້ອຍ ฯລฯ ຈຶ່ງພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດທ່ານພຣະອຸທາຍີຈຶ່ງຊັກສື່ໃຫ້ຢູ່ຮ່ວມກັບຊົ່ວຄາວລະ" ຄັນພິກສຸເຫລົ່ານັ້ນຕຳໜິທ່ານພຣະອຸທາຍີໂດຍປະການຕ່າງໆ ແລ້ວຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

[໓໔໔] "ພິກສຸທັງຫລາຍ ເຣື້ອງເຄີຍມີມາແລ້ວ ມີຣືສີອ້າຍນ້ອງ ໔ ຄົນ ອາສັຍຢູ່ໃກ້ແມ່ນ້ຳຄົງຄາ ຄັ້ງນັ້ນ ມນີກັນຖນາຄຣາຊຂຶ້ນຈາກແມ່ນ້ຳຄົງຄາ ເຂົ້າໄປຫາຣືສີຜູ້ນ້ອງເຖິງທີ່ຢູ່ ຄັນເຖິງແລ້ວໄດ້ພັກວົງຂົດທາງລ້ອມ ຮອບຣືສີ ໗ ຮອບ ແຜ່ພັງພານໃຫຍ່ປົກເຫນືອສີສະຣືສີຜູ້ນ້ອງກັບຈ່ອຍຜອມ ຫມອງເສົ້າ ຫລ່າເຫລືອງ ເສັ້ນເອັນຂຶ້ນເຕັມໄປຫມົດ ເພາະຄວາມຫວາດກົວນາຄຣາຊ ຣືສີຜູ້ອ້າຍເຫັນຣືສີຜູ້ນ້ອງຈ່ອຍຜອມ ຫມອງເສົ້າ ຫລ່າເຫລືອງ ເສັ້ນເອັນຂຶ້ນເຕັມໄປຫມົດ ຈຶ່ງຖາມວ່າ "ເພາະເຫຕຸໃດ ທ່ານຈຶ່ງຈ່ອຍຜອມ ຫມອງເສົ້າ ຫລ່າເຫລືອງ ເສັ້ນເອັນຂຶ້ນເຕັມໄປຫມົດ" ຣືສີຜູ້

ນ້ອງຕອບວ່າ "ທີ່ນີ້ມີມນິກັນຖນາຄຣາຊຂຶ້ນຈາກແມ່ນ້ຳຄົງຄາມາຫາຜູ້ຂ້າ ແລ້ວພັກວົງຂົດຫາງລ້ອມຮອບຜູ້ຂ້າ ໆ ຮອບ ແຜ່ພັງພານໃຫຍ່ປົກເຫນືອສີສະ ເພາະຄວາມຢ້ານນາຄຣາຊນັ້ນ ຜູ້ຂ້າຈຶ່ງຈ່ອຍຜອມ ຫມອງເສົ້າ ຫລ່າເຫລືອງ ເສັ້ນເອັນຂຶ້ນເຕັມໄປຫມົດ' ຣືສີຜູ້ອ້າຍຖາມວ່າ "ທ່ານຕ້ອງການບໍ່ໃຫ້ນາຄຣາຊມາຫາແມ່ນບໍ່" ຣືສີຜູ້ນ້ອງຕອບວ່າ "ຜູ້ຂ້າຕ້ອງການບໍ່ໃຫ້ນາຄຣາຊນັ້ນມາຫາ" ຣືສີຜູ້ອ້າຍ ຖາມວ່າ "ທ່ານເຫັນນາຄຣາຊມີຫຍັງແດ່" ຣືສີຜູ້ນ້ອງຕອບວ່າ "ຜູ້ຂ້າເຫັນແກ້ວມນີປະດັບທີ່ຄໍ" ຣືສີຜູ້ອ້າຍກ່າວວ່າ "ຖ້າເຊັ່ນນັ້ນ ທ່ານຈົ່ງກ່າວຂໍແກ້ວມນີນາຄຣາຊວ່າ ທ່ານຈົ່ງໃຫ້ແກ້ວມນີແກ່ອາຕມາເຖີດ ອາຕມາ ຢາກໄດ້" ພິກສຸທັງຫລາຍ ຄັນມນິກັນຖນາຄຣາຊຂຶ້ນຈາກແມ່ນ້ຳຄົງຄາເຂົ້າໄປຫາຣືສີຜູ້ນ້ອງເຖິງທີ່ຢູ່ ພັກຢູ່ ນະ ທີ່ສົມຄວຣ ຣືສີຜູ້ນ້ອງກ່າວວ່າ "ທ່ານຈົ່ງໃຫ້ແກ້ວມນີແກ່ອາຕມາ ອາຕມາຢາກໄດ້" ນາຄຣາຊຄິດວ່າ "ພິກສຸຂໍແກ້ວມນີ ພິກສຸຢາກໄດ້ແກ້ວມນີ" ແລ້ວຮີບຫລີກຫນີໄປທັນທີ ແມ່ນຄັ້ງທີ ໔ ມນິກັນຖກນາຄຣາຊຂຶ້ນຈາກແມ່ນ້ຳຄົງຄາ ເຂົ້າໄປຫາຣືສີຜູ້ນ້ອງ ຯລຯ ແມ່ນຄັ້ງທີ ໓ ຣືສີຜູ້ນ້ອງກ່າວວ່າ "ທ່ານຈົ່ງໃຫ້ແກ້ວມນີແກ່ອາຕມາ ອາຕມາຢາກໄດ້" ລຳດັບນັ້ນມນິກັນຖນາຄຣາຊກ່າວກັບຣືສີຜູ້ນ້ອງເປັນຄາຖາວ່າ "ເພາະແກ້ວມນີດວງນີ້ເປັນເຫຕຸ ເຮັດໃຫ້ເຂົ້ານ້ຳເກີດຂຶ້ນແກ່ຂ້າພະເຈົ້າມາກມາຍ ຂ້າພະເຈົ້າໃຫ້ແກ້ວມນີທ່ານບໍ່ໄດ້ ທ່ານເປັນຄົນຂໍເກີນໄປ ຂ້າພະເຈົ້າຈະບໍ່ມາອາສົມ ທ່ານອີກແລ້ວ ທ່ານຂໍແກ້ວມນີຈົນເຮັດໃຫ້ຂ້າພະເຈົ້າຫວາດກົວ ເຫມືອນຊາຍຫນຸ່ມຖືດາບຄົມທີ່ຝົນດ້ວຍຫີນເຮັດໃຫ້ຜູ້ອື່ນສະດຸ້ງຢ້ານ ຂ້າພະເຈົ້າໃຫ້ແກ້ວມນີທ່ານບໍ່ໄດ້ ທ່ານເປັນຄົນຂໍເກີນໄປ ຂ້າພະເຈົ້າຈະບໍ່ມາອາສົມທ່ານອີກແລ້ວ" ພິກສຸທັງຫລາຍ ຄັນແລ້ວມນິກັນຖນາຄຣາຊຈາກໄປພ້ອມກັບຮຳເພີງວ່າ "ພິກສຸຂໍແກ້ວມນີ ພິກສຸຢາກໄດ້ແກ້ວມນີ" ໄປແລ້ວບໍ່ຫວນກັບມາອີກເລີຍ ຕໍ່ມາຣືສີຜູ້ນ້ອງກັບຈ່ອຍຜອມ ຫມອງເສົ້າ ຫລ່າເຫລືອງ ເສັ້ນເອັນຂຶ້ນເຕັມໄປຫມົດຍິ່ງກວ່າແຕ່ກ່ອນເພາະບໍ່ໄດ້ພົບນາຄຣາຊຮູບງາມຫນ້າເບິ່ງ ຣືສີຜູ້ອ້າຍເຫັນຣືສີຜູ້ນ້ອງຈ່ອຍຜອມ ຯລຯ ຖາມວ່າ "ເພາະເຫຕຸໃດທ່ານຈຶ່ງຈ່ອຍຜອມ ຫມອງເສົ້າ ຫລ່າເຫລືອງ ເສັ້ນເອັນຂຶ້ນເຕັມໄປຫມົດຍິ່ງກວ່າແຕ່ກ່ອນ" ຣືສີຜູ້ນ້ອງຕອບວ່າ "ຜູ້ຂ້າຈ່ອຍຜອມ ຯລຯ ເພາະຜູ້ຂ້າບໍ່ເຫັນນາຄຣາຊຮູບງາມ ຫນ້າເບິ່ງນັ້ນ" ຣືສີຜູ້ອ້າຍກ່າວເປັນຄາຖາວ່າ "ບຸຄຄົລບໍ່ຄວຣຂໍສິ່ງທີ່ຮູ້ວ່າເປັນທີ່ຮັກຂອງເຂົາ ອີກຢ່າງນຶ່ງເພາະຂໍເກີນໄປຍ່ອມເປັນທີ່ກຽດຊັງ ນາຄຣາຊຖືກຣືສີຂໍແກ້ວມນີ ຈຶ່ງບໍ່ຫວນກັບມາໃຫ້ຣືສີເຫັນອີກເລີຍ" ພິກສຸທັງຫລາຍ ການຂໍ ການອອກປາກຂໍ ຍ່ອມບໍ່ເປັນທີ່ພໍໃຈແມ່ນຂອງພວກສັຕວ໌ເດັຽຣະສານເຫລົ່ານັ້ນ ບໍ່ຈຳຕ້ອງກ່າວເຖິງພວກມນຸສຍ໌ເລີຍ

### ເຣື່ອງນົກຝູງໃຫຍ່

[໓໔໕] ພິກສຸທັງຫລາຍ ເຣື້ອງເຄີຍມີມາແລ້ວ ພິກສຸຮູບນຶ່ງຢູ່ໃນຮາວປ່າແຫ່ງນຶ່ງເນີນພູເຂົາຫິມພານຕ໌ ບໍ່ໄກຈາກທີ່ນັ້ນມີຫນອງນ້ຳໃຫຍ່ ນົກຝູງໃຫຍ່ທ່ຽວຫາອາຫານທີ່ຫນອງນ້ຳຕລອດທັງເວັນ ພໍຮອດຍາມແລງກໍເຂົ້າໄປອາສັຍຮາວປ່າ ພິກສຸນັ້ນຣຳຄານສຽງນົກຈຶ່ງເຂົ້າໄປຫາເຮົາເຖິງທີ່ຢູ່ ຂາບໄຫວ້ເຮົາແລ້ວນັ່ງລົງ ນະ ທີ່ສົມ ຄວຣ ເຮົາຖາມທ່ານວ່າ "ພິກສຸ ທ່ານຍັງສະບາຍດີຫລື ຍັງພໍເປັນຢູ່ໄດ້ຫລື ທ່ານເດີນທາງມາໂດຍບໍ່ລຳບາກ ຫລື ທ່ານມາຈາກໃສ" ພິກສຸນັ້ນຂາບທູລວ່າ "ສະບາຍດີ ພຣະພຸທທເຈົ້າຂ້າ ພໍເປັນຢູ່ໄດ້ ພຣະພຸທທເຈົ້າຂ້າ
ຂ້າພຣະພຸທທເຈົ້າເດີນທາງມາໂດຍບໍ່ລຳບາກ ພຣະພຸທທເຈົ້າຂ້າ ແຖບພູເຂົາຫິມພານຕ໌ມີຮາວປ່າໃຫຍ່ ບໍ່ໄກຈາກທີ່ນັ້ນ ມີຫນອງນ້ຳໃຫຍ່ ນົກຝູງໃຫຍ່ທ່ຽວຫາອາຫານທີ່ຫນອງນ້ຳຕລອດທັງເວັນ ພໍຮອດຍາມແລງກໍເຂົ້າໄປອາສັຍຮາວປ່າ ຂ້າພຣະພຸທທເຈົ້າຣຳຄານສຽງນົກຈຶ່ງຫນີມາຈາກທີ່ນັ້ນ" "ທ່ານຕ້ອງການບໍ່ໃຫ້ຝູງນົກມາແມ່ນບໍ່" "ຂ້າພຣະອົງຄ໌ ຕ້ອງການບໍ່ໃຫ້ຝູງນົກມາ ພຣະພຸທທເຈົ້າຂ້າ" "ຖ້າຢ່າງນັ້ນ ທ່ານຈົ່ງກັບໄປຍັງຮາວປ່າ ແລ້ວເວລາປຖົມຍາມແຫ່ງຣາຕຣີ ປະກາດຂຶ້ນ ໓ ຄັ້ງວ່າ 'ນົກທີ່ອາສັຍຮາວປ່ານີ້ມີເທົ່າໃດ ຈົ່ງຟັງເຮົາ ເຮົາຕ້ອງການຂົນ ຈົ່ງໃຫ້ຂົນແກ່ເຮົາຕົວລະ ໑ ອັນ' ເວລາມັຊຍິມຍາມປະກາດຂຶ້ນ ໓ ຄັ້ງວ່າ 'ນົກທີ່ອາສັຍຮາວປ່ານີ້ມີເທົ່າໃດ ຈົ່ງຟັງເຮົາ ເຮົາຕ້ອງການຂົນ ຈົ່ງໃຫ້ຂົນແກ່ເຮົາຕົວລະ ໑ ອັນ' ເວລາປັຈສິມຍາມກໍປະກາດຂຶ້ນ ໓ ຄັ້ງວ່າ 'ນົກທີ່ອາສັຍຮາວປ່ານີ້ມີເທົ່າໃດ ຈົ່ງຟັງເຮົາ ເຮົາຕ້ອງການຂົນ ຈົ່ງໃຫ້ຂົນແກ່ເຮົາຕົວລະ ໑ ອັນ' ຕໍ່ມາພິກສຸນັ້ນກັບໄປຍັງຮາວປ່າ ເວລາປຖົມຍາມແຫ່ງຣາຕຣີ ປະກາດຂຶ້ນ ໓ ຄັ້ງວ່າ "ນົກທີ່ອາສັຍຮາວປ່ານີ້ມີເທົ່າໃດ ຈົ່ງຟັງເຮົາ ເຮົາຕ້ອງການຂົນ ຈົ່ງໃຫ້ຂົນແກ່ເຮົາຕົວລະ ໑ ອັນ" ເວລາມັຊຍິມຍາມ ຯລຯ ປັຈສິມຍາມ ກໍປະກາດເຊັ່ນນັ້ນ ໓ ຄັ້ງວ່າ "ນົກທີ່ອາສັຍຮາວປ່ານີ້ມີເທົ່າໃດ ຈົ່ງຟັງຂ້າພະເຈົ້າ ຯລຯ ຈົ່ງໃຫ້ຂົນແກ່ເຮົາຕົວລະ ໑ ອັນ" ຄັນຝູງນົກຮູ້ວ່າ "ພິກສຸຂໍຂົນ ພິກສຸຕ້ອງການຂົນ" ກໍພາກັນບິນຫນີຈາກໄປແລ້ວບໍ່ຫວນກັບມາອີກເລີຍ ພິກສຸທັງຫລາຍ ການຂໍ ການອອກປາກຂໍ ຍ່ອມບໍ່ເປັນທີ່ພໍໃຈແມ່ນ ຂອງພວກສັຕວ໌ເດັຽຣະສານເຫລົ່ານັ້ນ ບໍ່ຈຳຕ້ອງກ່າວເຖິງພວກມນຸສຍ໌ເລີຍ

## ເຣື້ອງຣັຖບາລກຸລບຸຕຣ

[໓໔໖] ພິກສຸທັງຫລາຍ ເຣື້ອງເຄີຍມີມາແລ້ວ ບິດາຂອງຣັຖບາລກຸລບຸຕຣ ກ່າວເປັນຄາຖາວ່າ "ລູກຣັຖບາລ ຄົນຈຳນວນຫລາຍພາກັນມາຂໍພໍ່ທັງທີ່ພໍ່ກໍບໍ່ຮູ້ຈັກ ຈັ່ງໃດລູກຈຶ່ງບໍ່ຂໍພໍ່ແດ່ລະ" ຣັຖບາລກຸລບຸຕຣກ່າວຕອບບິດາວ່າ "ຄົນຂໍຍ່ອມບໍ່ເປັນທີ່ຊອບໃຈຂອງຜູ້ຖືກຂໍ ຄົນຖືກຂໍ ເມື່ອບໍ່ໃຫ້ ກໍບໍ່ເປັນທີ່ຊອບໃຈຂອງຜູ້ຂໍ ເພາະສະນັ້ນ ລູກຈຶ່ງບໍ່ຂໍພໍ່ ຢ່າໃຫ້ລູກເປັນຄົນນ່າຊັງຂອງພໍ່ເລີຍ" ພິກສຸ

ທັງຫລາຍ ຣັຖບາລກຸລບຸຕຣຍັງກ່າວກັບບິດາຂອງຕົນ ຢ່າງນີ້ ບໍ່ຈໍາຕ້ອງກ່າວເຖິງຄົນອື່ນທີ່ກ່າວກັບຄົນອື່ນເລີຍ

[໓໔໗] ພິກສຸທັງຫລາຍ ຊັພຍ໌ສົມບັຕຂອງຄຣືຫັສຖ໌ຣວບຣວມໄວ້ໄດ້ຍາກ ເມື່ອໄດ້ມາກໍເກັບຮັກສາໄວ້ໄດ້ຍາກ ໂມຂບຸຣຸສທັງຫລາຍ ເມື່ອຊັພຍ໌ສົມບັຕທີ່ພວກຄຣືຫັສຖ໌ຣວບຣວມໄວ້ໄດ້ຍາກ ທັງເມື່ອໄດ້ມາແລ້ວກໍເກັບຮັກສາໄວ້ໄດ້ຍາກເຊັ່ນນີ້ ທ່ານທັງຫລາຍກັບເປັນຜູ້ມາກໄປດ້ວຍການຂໍ ເປັນຜູ້ມາກໄປດ້ວຍການອອກປາກຂໍດ້ວຍການກ່າວວ່າ 'ທ່ານທັງຫລາຍຈົ່ງໃຫ້ຄົນງານ ອຸປກອນກໍ່ສ້າງສໍາເຣັຈຮູບ ໂຄ ກວຽນ ມີດ ຂວານ ຊ້ອນ ຈົກ ສິ່ວ ເຄືອໄມ້ ໄມ້ໄຜ່ ຫຍ້າມຸງກະຕ່າຍ ຫຍ້າແຝກ ຫຍ້າສາມັນ ດິນຫນຽວ' ການກະທໍາຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງ ດັ່ງນີ້

ພຣະບັນຍັຕ

[໓໔໘] ກໍ ພິກສຸຜູ້ຈະສ້າງກຸຕີທີ່ບໍ່ມີເຈົ້າຂອງສ້າງຖວາຍ ສ້າງເປັນຂອງສ່ວນຕົວ ດ້ວຍການຂໍເອົາເອງ ເພິ່ງ ສ້າງໃຫ້ໄດ້ຂນາດ ຂນາດໃນການສ້າງນັ້ນ ດັ່ງນີ້: ຍາວ ໑໒ ຄືບ ກວ້າງ ໗ ຄືບ ໂດຍຄືບພຣະສຸຄຕ໑ ຕ້ອງພາພິກສຸທັງຫລາຍໄປສະແດງພື້ນທີ່ໃຫ້ ພິກສຸເຫລົ່ານັ້ນເພິ່ງສະແດງພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຖ້າພິກສຸສ້າງກຸຕີດ້ວຍການຂໍເອົາເອງ ໃນທີ່ທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ບໍ່ພາພິກສຸທັງຫລາຍໄປເພື່ອສະແດງພື້ນທີ່ໃຫ້ ຫລືສ້າງໃຫ້ເກີນຂນາດ ເປັນສັງຂາທິເສສ

ເຣື່ອງພິກສຸຊາວເມືອງອາລະວີ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ສັງຂາທິເສສກັນຫ໌] ໖. ກຸດີການສິກຂາບົທ ສິກຂາບົທວິພັງຄ໌

ສິກຂາບົທວິພັງຄ໌

[໓໔໙] ທີ່ຊື່ວ່າ ການຂໍເອົາເອງ ຄື ຂໍຄົນງານແດ່ ອຸປກອນກໍ່ສ້າງສໍາເຣັຈຮູບແດ່ ໂຄແດ່ ກວຽນແດ່ ມີດແດ່ ຂວານແດ່ ຊ້ອນແດ່ ຈົກແດ່ ສິ່ວແດ່ ເຄືອໄມ້ແດ່ ໄມ້ໄຜ່ແດ່ ຫຍ້າມຸງກະຕ່າຍແດ່ ຫຍ້າແຝກແດ່ ຫຍ້າສາມັນແດ່ ດິນຫນຽວແດ່ ດ້ວຍຕົນເອງ

ທີ່ຊື່ວ່າ ກຸຕິ ໄດ້ແກ່ ທີ່ຢູ່ຊຶ່ງໂບກຕາບພາຍໃນຫລືພາຍນອກຫລືໂບກຕາບທັງພາຍໃນພາຍນອກ

ຄຳວ່າ ສ້າງ ຄື ສ້າງເອງຫລືໃຊ້ຄົນອື່ນສ້າງ

ຄຳວ່າ ທີ່ບໍ່ມີເຈົ້າຂອງສ້າງຖວາຍ ຄື ບໍ່ມີໃຜອື່ນ ບໍ່ວ່າຈະເປັນຍິງຫລືຊາຍ ຄຣືຫັສຖ໌ຫລືບັພຊິຕ ເປັນເຈົ້າຂອງ ສ້າງຖວາຍ

ຄຳວ່າ ສ້າງເປັນຂອງສ່ວນຕົວ ຄື ເພື່ອປໂຍດຕົນ

ຄຳວ່າ ເພິງສ້າງໃຫ້ໄດ້ຂນາດ ຂນາດໃນການສ້າງນັ້ນ ດັ່ງນີ້ : ຍາວ ໑໒ ຄືບ ໂດຍຄືບພຣະສຸຄຕ ຄື ວັດດ້ານນອກກຸຕິ

ຄຳວ່າ ກວ້າງ ໗ ຄືບ ຄື ວັດດ້ານໃນຝາຜນັງ

ຄຳວ່າ ຕ້ອງພາພິກສຸທັງຫລາຍໄປສະແດງພື້ນທີ່ໃຫ້ ອທິບາຍວ່າ ພິກສຸຜູ້ຈະສ້າງກຸຕິນັ້ນ ເພິງໃຫ້ແຜ້ວຖາງພື້ນທີ່ສ້າງກຸຕິ ແລ້ວເຂົ້າໄປຫາສົງຂ໌ ຫົ່ມຜ້າບ່ຽງບ່າ ຂາບຕີນພິກສຸຜູ້ແກ່ພັນສາກວ່າ ນັ່ງຄຸເຂົ່າ ປະນົມມືກ່າວ ຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຜູ້ຂ້າຕ້ອງການສ້າງກຸຕິທີ່ບໍ່ມີເຈົ້າຂອງສ້າງຖວາຍ ສ້າງເປັນຂອງສ່ວນຕົວ ດ້ວຍ ການຂໍເອົາເອງ ຜູ້ຂ້າຂໍໃຫ້ສົງຂ໌ກວດເບິ່ງພື້ນທີ່ສ້າງກຸຕິ ຂນ້ອຍ"

ເພິງກ່າວຂໍພິກສຸທັງຫລາຍດັ່ງນີ້ເປັນຄັ້ງທີ່ ໒ ເພິງກ່າວຂໍພິກສຸທັງຫລາຍດັ່ງນີ້ເປັນຄັ້ງທີ ໓

ຖ້າສົງຂ໌ທັງປວງສາມາດໄປກວດເບິ່ງພື້ນທີ່ສ້າງກຸຕິໄດ້ ກໍຕ້ອງໄປກວດເບິ່ງດ້ວຍກັນທຸກຮູບ

ຖ້າສົງຂ໌ບໍ່ສາມາດຈະໄປກວດເບິ່ງພື້ນທີ່ສ້າງກຸຕິໄດ້ຫມົດທຸກຮູບ ກໍຕ້ອງຂໍພວກພິກສຸທີ່ສລາດສາມາດຮູ້ຈັກພື້ນທີ່ວ່າ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບແລ້ວແຕ່ງຕັ້ງ

## ວິທີແຕ່ງຕັ້ງ ແລະກັມວາຈາແຕ່ງຕັ້ງ

ພິກສຸທັງຫລາຍ ສົງຂ໌ເພິງແຕ່ງຕັ້ງຢ່າງນີ້ ຄື ພິກສຸຜູ້ສລາດສາມາດ ເພິງປະກາດໃຫ້ສົງຂ໌ຊາບວ່າ

[໑໕໐] "ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ພິກສຸຊື່ນີ້ຕ້ອງການຈະສ້າງກຸຕິທີ່ບໍ່ມີເຈົ້າຂອງສ້າງຖວາຍ ສ້າງເປັນຂອງສ່ວນຕົວ ດ້ວຍການຂໍເອົາເອງ ພິກສຸນັ້ນຂໍໃຫ້ສົງຂ໌ກວດເບິ່ງພື້ນທີ່ສ້າງກຸຕິ ຖ້າສົງຂ໌ພ້ອມກັນແລ້ວເພິງແຕ່ງຕັ້ງພິກສຸຊື່ນີ້ແລະຊື່ນີ້ໃຫ້ກວດເບິ່ງພື້ນທີ່ສ້າງກຸຕິໃຫ້ແກ່ພິກສຸຊື່ນີ້ ນີ້ເປັນຍັຕຕິ

ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ພິກສຸຊື່ນີ້ຕ້ອງການຈະສ້າງກຸຕິທີ່ບໍ່ມີເຈົ້າຂອງສ້າງຖວາຍ ສ້າງເປັນຂອງສ່ວນຕົວ ດ້ວຍການຂໍເອົາເອງ ພິກສຸນັ້ນຂໍໃຫ້ສົງຂ໌ກວດເບິ່ງພື້ນທີ່ສ້າງກຸຕິ ສົງຂ໌

ແຕ່ງຕັ້ງພິກສຸຊື່ນີ້ແລະຊື່ນີ້ໃຫ້ກວດເບິ່ງພື້ນທີ່ສ້າງກຸຕິໃຫ້ແກ່ພິກສຸຊື່ນີ້ ທ່ານຮູບໃດເຫັນດ້ວຍກັບການແຕ່ງຕັ້ງພິກສຸຊື່ນີ້ແລະຊື່ນີ້ໃຫ້ກວດເບິ່ງພື້ນທີ່ສ້າງກຸຕິໃຫ້ແກ່ພິກສຸຊື່ນີ້ທ່ານຮູບນັ້ນເພິງນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນເພິງທັກທ້ວງ ພິກສຸຊື່ນີ້ແລະຊື່ນີ້ ສົງຊ໌ແຕ່ງຕັ້ງໃຫ້ກວດເບິ່ງພື້ນທີ່ສ້າງກຸຕິໃຫ້ແກ່ພິກສຸຊື່ນີ້ ສົງຊ໌ເຫັນດ້ວຍ ເພາະສະນັ້ນ ຈຶ່ງນິ່ງ ຂ້າພະເຈົ້າຂໍຖືຄວາມນິ່ງນັ້ນເປັນມະຕິຢ່າງນີ້”

## ວິທີສະແດງພື້ນທີ່

[໓໕໑] ພິກສຸທັງຫລາຍທີ່ໄດ້ຮັບແຕ່ງຕັ້ງເຫລົ່ານັ້ນ ຕ້ອງໄປທີ່ນັ້ນແລ້ວເພິງກວດເບິ່ງພື້ນທີ່ສ້າງກຸຕິ ໃຫ້ຮູ້ວ່າ ເປັນພື້ນທີ່ມີອັນຕຣາຍເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ເປັນພື້ນທີ່ບໍ່ມີບໍຣິເວນໂດຍ ຮອບ ຖ້າເປັນພື້ນທີ່ມີອັນຕຣາຍທັງບໍ່ມີບໍຣິເວນໂດຍຮອບ ເພິງບອກພິກສຸຮູບນັ້ນວ່າ “ຢ່າສ້າງໃນທີ່ນີ້” ຖ້າເປັນພື້ນທີ່ບໍ່ມີອັນຕຣາຍທັງມີບໍຣິເວນໂດຍຮອບເພິງບອກສົງຊ໌ວ່າ “ເປັນພື້ນທີ່ບໍ່ມີອັນຕຣາຍ ທັງມີບໍຣິເວນໂດຍຮອບ” ພິກສຸຜູ້ຈະສ້າງກຸຕິນັ້ນເພິງເຂົ້າໄປຫາສົງຊ໌ ຫົ່ມຜ້າບ່ຽງບ່າ ຂາບຕີນພິກສຸຜູ້ມີພັນສາແກ່ກວ່າ ນັ່ງຄຸເຂົ່າ ປະນົມມືກ່າວຢ່າງນີ້ວ່າ “ທ່ານຜູ້ຈະເຣີນ ຜູ້ຂ້າຕ້ອງການສ້າງກຸຕິທີ່ບໍ່ມີເຈົ້າຂອງສ້າງຖວາຍ ສ້າງເປັນຂອງສ່ວນຕົວດ້ວຍການຂໍເອົາເອງ ຜູ້ຂ້າຂໍໃຫ້ສົງຊ໌ສະແດງພື້ນທີ່ສ້າງກຸຕິ” ເພິງກ່າວຂໍພິກສຸທັງຫລາຍດັ່ງນີ້ເປັນຄັ້ງທີ ໒ ເພິງກ່າວຂໍພິກສຸທັງຫລາຍດັ່ງນີ້ເປັນຄັ້ງທີ ໓

## ກັມວາຈາຂໍໃຫ້ສົງຊ໌ສະແດງພື້ນທີ່ສ້າງກຸຕິ

ພິກສຸຜູ້ສລາດສາມາດເພິງປະກາດໃຫ້ສົງຊ໌ຊາບ ດັ່ງນີ້

[໓໕໒] “ທ່ານຜູ້ຈະເຣີນ ຂໍສົງຊ໌ຈົ່ງຟັງຂ້າພະເຈົ້າ ພິກສຸຊື່ນີ້ຕ້ອງການຈະສ້າງກຸຕິທີ່ບໍ່ມີເຈົ້າຂອງສ້າງຖວາຍສ້າງເປັນຂອງສ່ວນຕົວ ດ້ວຍການຂໍເອົາເອງ ພິກສຸນັ້ນຂໍໃຫ້ສົງຊ໌ສະແດງພື້ນທີ່ສ້າງກຸຕິ ຖ້າສົງຊ໌ພ້ອມກັນແລ້ວ ເພິງໄປສະແດງພື້ນທີ່ສ້າງກຸຕິໃຫ້ແກ່ພິກສຸຊື່ນີ້ ນີ້ເປັນຍັຕຕິ

ທ່ານຜູ້ຈະເຣີນ ຂໍສົງຊ໌ຈົ່ງຟັງຂ້າພະເຈົ້າ ພິກສຸຊື່ນີ້ຕ້ອງການຈະສ້າງກຸຕິທີ່ບໍ່ມີເຈົ້າຂອງສ້າງຖວາຍສ້າງເປັນຂອງສ່ວນຕົວ ດ້ວຍການຂໍເອົາເອງ ພິກສຸນັ້ນຂໍໃຫ້ສົງຊ໌ສະແດງພື້ນທີ່ສ້າງກຸຕິ ສົງຊ໌ສະແດງພື້ນທີ່ສ້າງກຸຕິໃຫ້ແກ່ພິກສຸຊື່ນີ້ ທ່ານຮູບໃດເຫັນດ້ວຍກັບການສະແດງພື້ນທີ່ສ້າງກຸຕິໃຫ້ແກ່ພິກສຸຊື່ນີ້ ທ່ານຮູບນັ້ນເພິງນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນເພິງທັກທ້ວງ ພື້ນທີ່ສ້າງກຸຕິ

ສົງຊ໌ສະແດງໃຫ້ແກ່ພິກສຸຊື່ນີ້ແລ້ວ ສົງຊ໌ເຫັນດ້ວຍ ເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືເອົາຄວາມນິ່ງນັ້ນເປັນມະຕິຢ່າງນີ້”

[໓໕໓] ທີ່ຊື່ວ່າ ເປັນພື້ນທີ່ມີອັນຕຣາຍ ຄື ເປັນທີ່ຢູ່ຂອງມົດ ເປັນທີ່ຢູ່ຂອງປວກ ເປັນທີ່ຢູ່ຂອງຫນູ ເປັນທີ່ຢູ່ຂອງງູ ເປັນທີ່ຢູ່ຂອງແມງປ່ອງ ເປັນທີ່ຢູ່ຂອງຂີ້ເຂັບ ເປັນທີ່ຢູ່ຂອງຊ້າງ ເປັນທີ່ຢູ່ຂອງມ້າ ເປັນທີ່ຢູ່ຂອງຣາຊສີຫ໌ ເປັນທີ່ຢູ່ຂອງເສືອໂຄ່ງ ເປັນທີ່ຢູ່ຂອງເສືອເຫລືອງ ເປັນທີ່ຢູ່ຂອງຫມີ ເປັນທີ່ຢູ່ຂອງສຸນັກປ່າ ຫລືເປັນທີ່ຢູ່ຂອງສັດວ໌ເດັຽຣະສານບາງເຫລົ່າ ຢູ່ໃກ້ນາ ຢູ່ໃກ້ສວນ ຢູ່ໃກ້ທາງສີ່ແຍກ(ບ່ອນປະຫານນັກໂທດ) ຢູ່ໃກ້ທີ່ທໍຣະມານນັກໂທສ ຢູ່ໃກ້ສຸສານ ຢູ່ໃກ້ອຸທຍານ ຢູ່ໃກ້ທີ່ຫລວງ ຢູ່ໃກ້ໂຮງຊ້າງ ຢູ່ໃກ້ໂຮງມ້າ ຢູ່ໃກ້ເຮືອນຈຳ ຢູ່ໃກ້ໂຮງສຸຣາ ຢູ່ໃກ້ຮ້ານຂາຍຊີ້ນ ຢູ່ໃກ້ຖນົນ ຢູ່ໃກ້ທາງສີ່ແຍກ(ບ່ອນປະຫານນັກໂທດ) ຢູ່ໃກ້ທີ່ປະຊຸມ ຫລືຢູ່ໃກ້ທາງເດີນ ນີ້ຊື່ວ່າ ພື້ນທີ່ມີອັນຕຣາຍທີ່ຊື່ວ່າ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຄື ກວຽນທີ່ເຂົາທຽມງົວຕາມ ປົກຕິບໍ່ສາມາດວນໄປໄດ້ ບັນໄດບໍ່ສາມາດຈະທອດວຽນໄປໄດ້ໂດຍຮອບ ນີ້ຊື່ວ່າ ພື້ນທີ່ບໍ່ມີບໍຣິເວນໂດຍຮອບ

ທີ່ຊື່ວ່າ ເປັນພື້ນທີ່ບໍ່ມີອັນຕຣາຍ ຄື ບໍ່ແມ່ນທີ່ຢູ່ຂອງມົດ ບໍ່ແມ່ນທີ່ຢູ່ຂອງປວກ ບໍ່ແມ່ນທີ່ຢູ່ຂອງຫນູ ບໍ່ແມ່ນທີ່ຢູ່ຂອງງູ ບໍ່ແມ່ນທີ່ຢູ່ຂອງແມງປ່ອງ ບໍ່ແມ່ນທີ່ຢູ່ຂອງຂີ້ເຂັບ ຯລຯ ບໍ່ໃກ້ທາງເດີນ ນີ້ຊື່ວ່າ ພື້ນທີ່ບໍ່ມີອັນ ຕຣາຍ ທີ່ຊື່ວ່າ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຄື ກວຽນທີ່ເຂົາທຽມງົວຕາມປົກຕິ ສາມາດວນໄປໄດ້ ບັນໄດສາມາດທອດວຽນໄປໄດ້ໂດຍຮອບ ນີ້ຊື່ວ່າ ພື້ນທີ່ມີບໍຣິເວນໂດຍຮອບ

ທີ່ຊື່ວ່າ ກາຣຂໍເອົາເອງ ອທິບາຍວ່າ ຂໍຄົນງານ ອຸປກອນກໍ່ສ້າງສຳເຣັຈຮູບ ຯລຯ ດິນຫນຽວ
ທີ່ຊື່ວ່າ ກຸຕິ ໄດ້ແກ່ ທີ່ຢູ່ຊຶ່ງໂບກເຄືອບສະເພາະພາຍໃນຫລືພາຍນອກ ຫລືໂບກຕາບທັງພາຍໃນພາຍນອກ
ຄຳວ່າ ສ້າງ ຄື ສ້າງເອງຫລືໃຊ້ຄົນອື່ນສ້າງ
ຄຳວ່າ ບໍ່ພາພິກສຸທັງຫລາຍໄປສະແດງພື້ນທີ່ໃຫ້ ຫລືສ້າງໃຫ້ເກີນຂນາດ ຄວາມວ່າ ບໍ່ຂໍໃຫ້ສົງຊ໌ສະແດງພື້ນທີ່ສ້າງກຸຕິດ້ວຍຢັຕຕິທຸຕິຍກັມວາຈາກ່ອນ ສ້າງເອງຫລືໃຊ້ຄົນອື່ນສ້າງເກີນກຳຫນົດແມ່ນພຽງເສັ້ນຜົມດຽວ ຈະຍາວຫລືກວ້າງ ຕ້ອງອາບັຕິທຸກກຕ ເພາະຄວາມພຍາຍາມແຕ່ລະຄັ້ງ ຍັງເຫລືອອິດອີກກ້ອນນຶ່ງຈຶ່ງຈະເສັດ ຕ້ອງອາບັຕິຖຸລລັຈຈັຍ ອິດກ້ອນສຸດທ້າຍເສັດແລ້ວ ຕ້ອງອາບັຕິສັງຊາທິເສສ

ຄຳວ່າ ເປັນສັງຊາທິເສສ ຄວາມວ່າ ສຳລັບອາບັຕິນັ້ນ ສົງຊ໌ເທົ່ານັ້ນໃຫ້ປຣິວາສ ຯລຯ ເພາະເຫຕຸ ນັ້ນ ຈຶ່ງຕຣັສຮຽກວ່າ "ເປັນສັງຊາທິເສສ"

## ບົທພາຊນີຍ໌

## ສົງຊ໌ບໍ່ໄດ້ສະແດງພື້ນທີ່ໃຫ້

[໓໕໔] ພິກສຸສ້າງກຸຕິທີ່ສົງຊ໌ບໍ່ໄດ້ສະແດງພື້ນທີ່ໃຫ້ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນ ໂດຍຮອບ ຕ້ອງອາບັຕິທຸກກຕ ໔ ຕົວ ກັບອາບັຕິສັງຊາທິເສສ ໑ ຕົວ

ພິກສຸສ້າງກຸຕິທີ່ສົງຊ໌ບໍ່ໄດ້ສະແດງພື້ນທີ່ໃຫ້ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕກັບອາບັຕິສັງຊາທິເສສ

ພິກສຸສ້າງກຸຕິທີ່ສົງຊ໌ບໍ່ໄດ້ສະແດງພື້ນທີ່ໃຫ້ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕກັບອາບັຕິສັງຊາທິເສສ

ພິກສຸສ້າງກຸຕິທີ່ສົງຊ໌ບໍ່ໄດ້ສະແດງພື້ນທີ່ໃຫ້ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິສັງຊາທິເສສ

## ສົງຊ໌ສະແດງພື້ນທີ່ໃຫ້

[໓໕໕] ພິກສຸສ້າງກຸຕິທີ່ສົງຊ໌ສະແດງພື້ນທີ່ໃຫ້ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນ ໂດຍຮອບ ຕ້ອງອາບັຕິທຸກກຕ ໔ ຕົວ

ພິກສຸສ້າງກຸຕິທີ່ສົງຊ໌ສະແດງພື້ນທີ່ໃຫ້ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕ

ພິກສຸສ້າງກຸຕິທີ່ສົງຊ໌ສະແດງພື້ນທີ່ໃຫ້ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕ

ພິກສຸສ້າງກຸຕິທີ່ສົງຊ໌ສະແດງພື້ນທີ່ໃຫ້ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ບໍ່ ຕ້ອງອາບັຕິ

## ສ້າງເກີນຂນາດ

ພິກສຸສ້າງກຸຕິເກີນຂນາດ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕ ໔ ຕົວ ກັບອາບັຕິສັງຂາທິເສສ ໑ ຕົວ

ພິກສຸສ້າງກຸຕິເກີນຂນາດ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕ ກັບອາບັຕິສັງຂາທິເສສ

ພິກສຸສ້າງກຸຕິເກີນຂນາດ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕກັບອາບັຕິສັງຂາທິເສສ

ພິກສຸສ້າງກຸຕິເກີນຂນາດ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິສັງຂາທິເສສ

## ສ້າງໄດ້ຂນາດ

ພິກສຸສ້າງກຸຕິໄດ້ຂນາດ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕ ໔ ຕົວ

ພິກສຸສ້າງກຸຕິໄດ້ຂນາດ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕ

ພິກສຸສ້າງກຸຕິໄດ້ຂນາດ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕ

ພິກສຸສ້າງກຸຕິໄດ້ຂນາດ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ບໍ່ຕ້ອງອາບັຕິ

## ສົງຂ໌ບໍ່ໄດ້ສະແດງພື້ນທີ່ໃຫ້ ສ້າງເກີນຂນາດ

ພິກສຸສ້າງກຸຕິທີ່ສົງຂ໌ບໍ່ໄດ້ສະແດງພື້ນທີ່ໃຫ້ ສ້າງເກີນຂນາດ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕ ໔ ຕົວກັບອາບັຕິສັງຂາທິເສສ ໔ ຕົວ

ພິກສຸສ້າງກຸຕິທີ່ສົງຄ໌ບໍ່ໄດ້ສະແດງພື້ນທີ່ໃຫ້ ສ້າງເກີນຂນາດ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍ ຣິເວນໂດຍຮອບ ຕ້ອງອາບັຕິທຸກກຕ ໑ ຕົວກັບອາບັຕິສັງຄາທິເສສ ໔ ຕົວ

ພິກສຸສ້າງກຸຕິທີ່ສົງຄ໌ບໍ່ໄດ້ສະແດງພື້ນທີ່ໃຫ້ ສ້າງເກີນຂນາດ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ບໍ່ ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕ ໑ ຕົວກັບອາບັຕິສັງຄາທິເສສ ໔ ຕົວ

ພິກສຸສ້າງກຸຕິທີ່ສົງຄ໌ບໍ່ໄດ້ສະແດງພື້ນທີ່ໃຫ້ ສ້າງເກີນຂນາດ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິສັງຄາທິເສສ ໔ ຕົວ

## ສົງຄ໌ສະແດງພື້ນທີ່ໃຫ້ ສ້າງໄດ້ຂນາດ

ພິກສຸສ້າງກຸຕິທີ່ສົງຄ໌ສະແດງພື້ນທີ່ໃຫ້ ສ້າງໄດ້ຂນາດ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິ ເວນໂດຍຮອບ ຕ້ອງອາບັຕິທຸກກຕ ໔ ຕົວ

ພິກສຸສ້າງກຸຕິທີ່ສົງຄ໌ສະແດງພື້ນທີ່ໃຫ້ ສ້າງໄດ້ຂນາດ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນ ໂດຍຮອບ ຕ້ອງອາບັຕິທຸກກຕ

ພິກສຸສ້າງກຸຕິທີ່ສົງຄ໌ສະແດງພື້ນທີ່ໃຫ້ ສ້າງໄດ້ຂນາດ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິ ເວນໂດຍຮອບ ຕ້ອງອາບັຕິທຸກກຕ

ພິກສຸສ້າງກຸຕິທີ່ສົງຄ໌ສະແດງພື້ນທີ່ໃຫ້ ສ້າງໄດ້ຂນາດ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິ ເວນໂດຍຮອບ ບໍ່ຕ້ອງອາບັຕິ

## ສັ່ງສ້າງກຸຕິທີ່ສົງຄ໌ບໍ່ໄດ້ສະແດງພື້ນທີ່ໃຫ້

[໓໕໓] ພິກສຸສັ່ງວ່າ "ຈົ່ງສ້າງກຸຕິໃຫ້ເຮົາ" ຜູ້ຮັບຄຳສັ່ງສ້າງກຸຕິທີ່ສົງຄ໌ບໍ່ໄດ້ສະແດງພື້ນທີ່ໃຫ້ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕ ໔ ຕົວກັບອາບັຕິສັງຄາທິເສສ ໑ ຕົວ ຯລຯ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕກັບອາບັຕິສັງຄາທິເສສ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕກັບອາບັຕິສັງຄາທິເສສ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິສັງຄາທິເສສ

## ສັ່ງສ້າງກຸຕິທີ່ສົງຊ໌ສະແດງພື້ນທີ່ໃຫ້

ພິກສຸສັ່ງວ່າ "ຈົ່ງສ້າງກຸຕິໃຫ້ເຮົາ" ຜູ້ຮັບຄຳສັ່ງສ້າງກຸຕິທີ່ສົງຊ໌ສະແດງພື້ນທີ່ໃຫ້ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກົຏ ໔ ຕົວ ຯລຯ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກົຏ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກົຏ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍເປັນພື້ນທີ່ມີບໍຣິເວນໂດຍຮອບ ບໍ່ຕ້ອງອາບັຕິ

## ສັ່ງສ້າງກຸຕິ ເຂົາສ້າງເກີນຂນາດ

ພິກສຸສັ່ງວ່າ "ຈົ່ງສ້າງກຸຕິໃຫ້ເຮົາ" ຜູ້ຮັບຄຳສັ່ງສ້າງກຸຕິເກີນຂນາດ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກົຏ ໔ ຕົວ ກັບອາບັຕິສັງຊາທິເສສ ໑ ຕົວ ຯລຯ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກົຏກັບອາບັຕິສັງຊາທິເສສ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກົຏກັບສັງຊາທິເສສ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິສັງຊາທິເສສ

## ສັ່ງສ້າງກຸຕິ ເຂົາສ້າງໄດ້ຂນາດ

ພິກສຸສັ່ງວ່າ "ຈົ່ງສ້າງກຸຕິໃຫ້ເຮົາ" ຜູ້ຮັບຄຳສັ່ງສ້າງກຸຕິໄດ້ຂນາດ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກົຏ ໔ ຕົວ ຯລຯ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກົຏ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກົຏ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ບໍ່ຕ້ອງອາບັຕິ

## ສັ່ງສ້າງກຸຕິທີ່ສົງຊ໌ບໍ່ໄດ້ສະແດງພື້ນທີ່ໃຫ້ ເຂົາສ້າງເກີນຂນາດ

ພິກສຸສັ່ງວ່າ "ຈົ່ງສ້າງກຸຕິໃຫ້ເຮົາ" ຜູ້ຮັບຄຳສັ່ງສ້າງກຸຕິທີ່ສົງຊ໌ບໍ່ໄດ້ສະແດງພື້ນທີ່ໃຫ້ສ້າງເກີນຂນາດ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກົຏ ໔ ຕົວກັບອາບັຕິສັງຊາທິເສສ ໔ ຕົວ ຯລຯ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຕ້ອງ

ອາບັຕິທຸກກຕ ໑ ຕົວກັບອາບັຕິສັງຂາທິເສສ ໔ ຕົວ ฯລฯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕ ໑ ຕົວກັບອາບັຕິສັງຂາທິເສສ ໔ ຕົວ ฯລฯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຕ້ອງອາ ບັຕິສັງຂາທິເສສ ໔ ຕົວ

## ສັ່ງສ້າງກຸຕິທີ່ສົງຂ໌ສະແດງພື້ນທີ່ໃຫ້ ເຂົາສ້າງໄດ້ຂນາດ

ພິກສຸສັ່ງວ່າ "ຈົ່ງສ້າງກຸຕິໃຫ້ເຮົາ" ຜູ້ຮັບຄຳສັ່ງສ້າງກຸຕິທີ່ສົງຂ໌ສະແດງພື້ນທີ່ໃຫ້ ສ້າງໄດ້ຂນາດ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕ ໔ ຕົວ ฯລฯ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕ ฯລฯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕ ฯລฯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ບໍ່ຕ້ອງອາບັຕິ

## ຫລີກໄປບໍ່ໄດ້ສັ່ງ ສົງຂ໌ບໍ່ໄດ້ສະແດງພື້ນທີ່ໃຫ້

[໓໕໗] ພິກສຸສັ່ງວ່າ "ຈົ່ງສ້າງກຸຕິໃຫ້ເຮົາ" ແລ້ວຫລີກໄປ ແຕ່ບໍ່ໄດ້ສັ່ງວ່າ "ກຸຕິນັ້ນ ສົງຂ໌ຕ້ອງສະແດງພື້ນທີ່ໃຫ້ ຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍແລະຕ້ອງເປັນພື້ນທີ່ມີບໍຣິເວນໂດຍຮອບ" ຜູ້ຮັບຄຳສັ່ງສ້າງກຸຕິທີ່ສົງຂ໌ບໍ່ໄດ້ສະແດງພື້ນທີ່ໃຫ້ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕ ໔ ຕົວກັບອາບັຕິສັງຂາທິເສສ ໑ ຕົວ ฯລฯ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕກັບອາບັຕິສັງຂາທິເສສ ฯລฯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕກັບອາບັຕິສັງຂາທິເສສ ฯລฯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິສັງຂາທິເສສ

## ຫລີກໄປບໍ່ໄດ້ສັ່ງ ສົງຂ໌ສະແດງພື້ນທີ່ໃຫ້

ພິກສຸສັ່ງວ່າ "ຈົ່ງສ້າງກຸຕິໃຫ້ເຮົາ" ແລ້ວຫລີກໄປ ແຕ່ບໍ່ໄດ້ສັ່ງວ່າ "ກຸຕິນັ້ນສົງຂ໌ຕ້ອງສະແດງພື້ນທີ່ໃຫ້ ຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍແລະຕ້ອງເປັນພື້ນທີ່ມີບໍຣິເວນໂດຍຮອບ" ຜູ້ຮັບຄຳສັ່ງສ້າງກຸຕິທີ່ສົງຂ໌ສະແດງພື້ນທີ່ໃຫ້ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບຕ້ອງອາບັຕິທຸກກຕ ໔ ຕົວ ฯລฯ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕ ฯລฯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕ ฯລฯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ບໍ່ຕ້ອງອາບັຕິ

## ຫລິກໄປບໍ່ໄດ້ສັ່ງ ເຂົາສ້າງເກີນຂນາດ

ພິກສຸສັ່ງວ່າ "ຈົ່ງສ້າງກຸຕິໃຫ້ເຮົາ" ແລ້ວຫລີກໄປ ແຕ່ບໍ່ໄດ້ສັ່ງວ່າ "ກຸຕິນັ້ນຕ້ອງໄດ້ຂນາດ ຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍແລະຕ້ອງເປັນພື້ນທີ່ມີບໍຣິເວນໂດຍຮອບ" ຜູ້ຮັບຄຳສັ່ງສ້າງກຸຕິໃຫ້ເກີນຂນາດ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕ ໔ ຕົວກັບອາບັຕິສັງຂາທິເສສ ໑ ຕົວ ฯລฯ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕກັບອາບັຕິສັງຂາທິເສສ ฯລฯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕກັບອາບັຕິສັງຂາທິເສສ ฯລฯ ເປັນພື້ນທີ່ບໍ່ມີ ອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິສັງຂາທິເສສ

## ຫລິກໄປບໍ່ໄດ້ສັ່ງ ເຂົາສ້າງໄດ້ຂນາດ

ພິກສຸສັ່ງວ່າ "ຈົ່ງສ້າງກຸຕິໃຫ້ເຮົາ" ແລ້ວຫລີກໄປ ແຕ່ບໍ່ໄດ້ສັ່ງວ່າ "ກຸຕິນັ້ນຕ້ອງສ້າງໄດ້ຂນາດ ຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍແລະຕ້ອງມີບໍຣິເວນໂດຍຮອບ" ຜູ້ຮັບຄຳສັ່ງສ້າງກຸຕິໄດ້ຂນາດ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕ ໔ ຕົວ ฯລฯ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕ ฯລฯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕ ฯລฯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ບໍ່ຕ້ອງອາບັຕິ

## ຫລິກໄປບໍ່ໄດ້ສັ່ງ ສົງຂ໌ບໍ່ໄດ້ສະແດງພື້ນທີ່ໃຫ້ ເຂົາສ້າງເກີນຂນາດ

ພິກສຸສັ່ງວ່າ "ຈົ່ງສ້າງກຸຕິໃຫ້ເຮົາ" ແລ້ວຫລີກໄປ ແຕ່ບໍ່ໄດ້ສັ່ງວ່າ "ກຸຕິນັ້ນສົງຂ໌ຕ້ອງສະແດງພື້ນທີ່ໃຫ້ ຕ້ອງສ້າງໃຫ້ໄດ້ຂນາດ ຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍແລະຕ້ອງມີບໍຣິເວນໂດຍຮອບ" ຜູ້ຮັບຄຳສັ່ງສ້າງກຸຕິທີ່ສົງຂ໌ບໍ່ໄດ້ສະແດງພື້ນທີ່ໃຫ້ ສ້າງເກີນຂນາດ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕ ໔ ຕົວກັບອາບັຕິສັງຂາທິເສສ ໔ ຕົວ ฯລฯ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນ ໂດຍຮອບ ຕ້ອງອາບັຕິທຸກກຕ ໑ ຕົວກັບອາບັຕິສັງຂາທິເສສ ໔ ຕົວ ฯລฯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນ ພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕ ໑ ຕົວກັບອາບັຕິສັງຂາທິເສສ ໔ ຕົວ ฯລฯ ເປັນພື້ນທີ່ບໍ່ມີ ອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິສັງຂາທິເສສ ໔ ຕົວ

ຫລີກໄປບໍ່ໄດ້ສັ່ງ ສົງຄ໌ສະແດງພື້ນທີ່ໃຫ້ ເຂົາສ້າງໄດ້ຂນາດ

ພິກສຸສັ່ງວ່າ "ຈົ່ງສ້າງກຸຕິໃຫ້ເຮົາ" ແລ້ວຫລີກໄປແຕ່ບໍ່ໄດ້ສັ່ງວ່າ "ກຸຕິນັ້ນສົງຄ໌ຕ້ອງສະແດງພື້ນທີ່ໃຫ້ ຕ້ອງສ້າງໃຫ້ໄດ້ຂນາດ ຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍແລະຕ້ອງມີບໍຣິເວນໂດຍຣອບ" ຜູ້ຮັບຄຳສັ່ງສ້າງກຸຕິທີ່ສົງຄ໌ສະແດງພື້ນທີ່ໃຫ້ ສ້າງໄດ້ຂນາດ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຣອບ ຕ້ອງອາບັຕິທຸກກຕ ໔ ຕົວ ຯລຯ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຣອບ ຕ້ອງອາບັຕິທຸກກຕ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຣອບ ຕ້ອງອາບັຕິທຸກກຕ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຣອບ ບໍ່ຕ້ອງອາບັຕິ

ສ້າງຜິດຄຳສັ່ງ ສົງຄ໌ບໍ່ໄດ້ສະແດງພື້ນທີ່ໃຫ້

[໓໕໗] ພິກສຸສັ່ງວ່າ "ຈົ່ງສ້າງກຸຕິໃຫ້ເຮົາ" ແລ້ວຫລີກໄປແຕ່ໄດ້ສັ່ງວ່າ "ກຸຕິນັ້ນ ສົງຄ໌ຕ້ອງສະແດງພື້ນທີ່ໃຫ້ ຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍແລະຕ້ອງມີບໍຣິເວນໂດຍຣອບ" ຜູ້ຮັບຄຳສັ່ງສ້າງກຸຕິທີ່ສົງຄ໌ບໍ່ໄດ້ສະແດງພື້ນທີ່ໃຫ້ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຣອບ ພິກສຸນັ້ນຊາບຂ່າວວ່າ "ເຂົາສ້າງກຸຕິທີ່ສົງຄ໌ບໍ່ໄດ້ສະແດງພື້ນທີ່ໃຫ້ເຮົາ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຣອບ" ພິກສຸນັ້ນເພິ່ງໄປເອງ ຫລືສົ່ງທູຕໄປບອກວ່າ "ກຸຕິນັ້ນສົງຄ໌ຕ້ອງສະແດງພື້ນທີ່ໃຫ້ ຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍແລະຕ້ອງມີບໍຣິເວນໂດຍຣອບ" ຖ້າທ່ານບໍ່ໄປເອງຫລືບໍ່ສົ່ງທູຕໄປບອກ ຕ້ອງອາບັຕິທຸກກຕ

ພິກສຸສັ່ງວ່າ "ຈົ່ງສ້າງກຸຕິໃຫ້ເຮົາ" ແລ້ວຫລີກໄປແລະໄດ້ສັ່ງວ່າ "ກຸຕິນັ້ນສົງຄ໌ຕ້ອງສະແດງພື້ນທີ່ໃຫ້ ຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍແລະຕ້ອງມີບໍຣິເວນໂດຍຣອບ" ຜູ້ຮັບຄຳສັ່ງສ້າງກຸຕິທີ່ສົງຄ໌ບໍ່ໄດ້ສະແດງພື້ນທີ່ໃຫ້ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຣອບ ພິກສຸນັ້ນຊາບຂ່າວວ່າ "ເຂົາສ້າງກຸຕິທີ່ສົງຄ໌ບໍ່ໄດ້ສະແດງພື້ນທີ່ໃຫ້ເຮົາ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຣອບ" ພິກສຸນັ້ນເພິ່ງໄປເອງຫລືສົ່ງທູຕໄປບອກວ່າ "ສົງຄ໌ຕ້ອງສະແດງພື້ນທີ່ໃຫ້ແລະຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍ" ຖ້າທ່ານບໍ່ໄປເອງຫລືບໍ່ສົ່ງທູຕໄປບອກ ຕ້ອງອາບັຕິທຸກກຕ

ພິກສຸສັ່ງວ່າ "ຈົ່ງສ້າງກຸຕິໃຫ້ເຮົາ" ແລ້ວຫລີກໄປແຕ່ໄດ້ສັ່ງວ່າ "ກຸຕິນັ້ນສົງຄ໌ຕ້ອງສະແດງພື້ນທີ່ໃຫ້ ຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍແລະຕ້ອງມີບໍຣິເວນໂດຍຣອບ" ຜູ້ຮັບຄຳສັ່ງສ້າງກຸຕິທີ່ສົງຄ໌ບໍ່ໄດ້ສະແດງພື້ນທີ່ໃຫ້ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຣອບພິກສຸນັ້ນຊາບຂ່າວວ່າ

'ເຂົາສ້າງກຸຕິທີ່ສົງຊ໌ບໍ່ໄດ້ສະແດງພື້ນທີ່ໃຫ້ເຮົາ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ' ພິກສຸນັ້ນເພິງໄປເອງຫລືສົ່ງທູຕໄປບອກວ່າ "ສົງຊ໌ຕ້ອງສະແດງພື້ນທີ່ໃຫ້ແລະຕ້ອງມີບໍຣິເວນໂດຍຮອບ" ຖ້າທ່ານບໍ່ໄປເອງຫລືບໍ່ສົ່ງທູຕໄປບອກ ຕ້ອງອາບັຕິທຸກກຕ

## ສ້າງຜິດຄຳສັ່ງ ສົງຊ໌ບໍ່ໄດ້ສະແດງພື້ນທີ່ໃຫ້

ພິກສຸສັ່ງວ່າ "ຈົ່ງສ້າງກຸຕິໃຫ້ເຮົາ" ແລ້ວຫລີກໄປແຕ່ໄດ້ສັ່ງວ່າ "ກຸຕິນັ້ນສົງຊ໌ຕ້ອງສະແດງພື້ນທີ່ໃຫ້ ຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍແລະຕ້ອງມີບໍຣິເວນໂດຍຮອບ" ຜູ້ຮັບຄຳສັ່ງສ້າງກຸຕິທີ່ສົງຊ໌ບໍ່ໄດ້ສະແດງພື້ນທີ່ໃຫ້ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ພິກສຸນັ້ນຊາບຂ່າວວ່າ "ເຂົາສ້າງກຸຕິທີ່ສົງຊ໌ບໍ່ໄດ້ສະແດງພື້ນທີ່ໃຫ້ເຮົາ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ" ພິກສຸນັ້ນເພິງໄປເອງຫລືສົ່ງທູຕໄປບອກວ່າ "ສົງຊ໌ຕ້ອງສະແດງພື້ນທີ່ໃຫ້" ຖ້າທ່ານບໍ່ໄປເອງຫລືບໍ່ສົ່ງທູຕໄປບອກ ຕ້ອງອາບັຕິທຸກກຕ

## ສ້າງຜິດຄຳສັ່ງ ສົງຊ໌ສະແດງພື້ນທີ່ໃຫ້

ພິກສຸສັ່ງວ່າ "ຈົ່ງສ້າງກຸຕິໃຫ້ເຮົາ" ແລ້ວຫລີກໄປແຕ່ໄດ້ສັ່ງວ່າ "ກຸຕິນັ້ນສົງຊ໌ຕ້ອງສະແດງພື້ນທີ່ໃຫ້ ຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍແລະຕ້ອງມີບໍຣິເວນໂດຍຮອບ" ຜູ້ຮັບຄຳສັ່ງສ້າງກຸຕິທີ່ສົງຊ໌ສະແດງພື້ນທີ່ໃຫ້ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ພິກສຸນັ້ນຊາບຂ່າວວ່າ "ເຂົາສ້າງກຸຕິທີ່ສົງຊ໌ສະແດງພື້ນທີ່ໃຫ້ເຮົາ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ" ພິກສຸນັ້ນເພິງໄປເອງຫລືສົ່ງທູຕໄປບອກວ່າ "ຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍແລະຕ້ອງມີບໍຣິເວນໂດຍຮອບ" ຖ້າທ່ານບໍ່ໄປເອງຫລືບໍ່ສົ່ງທູຕໄປບອກ ຕ້ອງອາບັຕິທຸກກຕ

ພິກສຸສັ່ງວ່າ "ຈົ່ງສ້າງກຸຕິໃຫ້ເຮົາ" ແລ້ວຫລີກໄປແລະໄດ້ສັ່ງວ່າ "ກຸຕິນັ້ນສົງຊ໌ຕ້ອງສະແດງພື້ນທີ່ໃຫ້ ຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍແລະຕ້ອງມີບໍຣິເວນໂດຍຮອບ" ຜູ້ຮັບຄຳສັ່ງສ້າງກຸຕິທີ່ສົງຊ໌ສະແດງພື້ນທີ່ໃຫ້ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ພິກສຸນັ້ນຊາບຂ່າວວ່າ "ເຂົາສ້າງກຸຕິທີ່ສົງຊ໌ສະແດງພື້ນທີ່ໃຫ້ເຮົາ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ" ພິກສຸນັ້ນເພິງໄປເອງຫລືສົ່ງທູຕໄປບອກວ່າ "ຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍ" ຖ້າທ່ານບໍ່ໄປເອງຫລືບໍ່ສົ່ງທູຕໄປບອກ ຕ້ອງອາບັຕິທຸກກຕ

ພິກສຸສັ່ງວ່າ "ຈົ່ງສ້າງກຸຕິໃຫ້ເຮົາ" ແລ້ວຫລີກໄປແລະໄດ້ສັ່ງວ່າ "ກຸຕິນັ້ນສົງຂ໌ຕ້ອງສະແດງພື້ນທີ່ໃຫ້ ຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍແລະຕ້ອງມີບໍຣິເວນໂດຍຮອບ" ຜູ້ຮັບຄຳສັ່ງສ້າງກຸຕິທີ່ສົງຂ໌ສະແດງພື້ນທີ່ໃຫ້ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບພິກສຸນັ້ນຊາບຂ່າວວ່າ "ເຂົາສ້າງກຸຕິທີ່ສົງຂ໌ສະແດງພື້ນທີ່ໃຫ້ເຮົາ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ" ພິກສຸນັ້ນເພິງໄປເອງຫລືສົ່ງທູຕໄປບອກວ່າ "ຕ້ອງມີບໍຣິເວນໂດຍຮອບ"ຖ້າທ່ານບໍ່ໄປເອງຫລືບໍ່ສົ່ງທູຕໄປບອກ ຕ້ອງອາບັຕິທຸກກຕ

ພິກສຸສັ່ງວ່າ "ຈົ່ງສ້າງກຸຕິໃຫ້ເຮົາ" ແລ້ວຫລີກໄປແລະໄດ້ສັ່ງວ່າ "ກຸຕິນັ້ນສົງຂ໌ຕ້ອງສະແດງພື້ນທີ່ໃຫ້ ຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍແລະຕ້ອງມີບໍຣິເວນໂດຍຮອບ" ຜູ້ຮັບຄຳສັ່ງສ້າງກຸຕິທີ່ສົງຂ໌ສະແດງພື້ນທີ່ໃຫ້ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ບໍ່ຕ້ອງອາບັຕິ

## ສັ່ງໄດ້ຂນາດ ເຂົາສ້າງເກີນຂນາດ

[໓໕໙] ພິກສຸສັ່ງວ່າ "ຈົ່ງສ້າງກຸຕິໃຫ້ເຮົາ" ແລ້ວຫລີກໄປແລະໄດ້ສັ່ງວ່າ "ກຸຕິນັ້ນຕ້ອງໄດ້ຂນາດ ຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍແລະຕ້ອງມີບໍຣິເວນໂດຍຮອບ" ຜູ້ຮັບຄຳສັ່ງສ້າງກຸຕິໃຫ້ເກີນຂນາດ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ພິກສຸນັ້ນຊາບຂ່າວວ່າ "ເຂົາສ້າງກຸຕິໃຫ້ເຮົາເກີນຂນາດ ເປັນພື້ນທີ່ມີອັນ ຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ" ພິກສຸນັ້ນເພິງໄປເອງຫລືສົ່ງທູຕໄປບອກວ່າ "ຕ້ອງໄດ້ຂນາດ ຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍແລະຕ້ອງມີບໍຣິເວນໂດຍຮອບ" ຯລຯ "ຕ້ອງໄດ້ຂນາດແລະຕ້ອງເປັນພື້ນທີ່ບໍ່ມີອັນ ຕຣາຍ" ຯລຯ "ຕ້ອງໄດ້ຂນາດແລະຕ້ອງມີບໍຣິເວນໂດຍຮອບ" ຯລຯ "ຕ້ອງໄດ້ຂນາດ" ຖ້າທ່ານບໍ່ໄປເອງ ຫລືບໍ່ສົ່ງທູຕໄປບອກ ຕ້ອງອາບັຕິທຸກກຕ

## ສັ່ງໄດ້ຂນາດ ເຂົາສ້າງໄດ້ຂນາດ

ພິກສຸສັ່ງວ່າ "ຈົ່ງສ້າງກຸຕິໃຫ້ເຮົາ" ແລ້ວຫລີກໄປ ແລະໄດ້ສັ່ງວ່າ "ກຸຕິນັ້ນຕ້ອງໄດ້ຂນາດ ຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍແລະຕ້ອງມີບໍຣິເວນໂດຍຮອບ" ຜູ້ຮັບຄຳສັ່ງສ້າງກຸຕິໃຫ້ໄດ້ຂນາດ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ພິກສຸນັ້ນຊາບຂ່າວວ່າ "ເຂົາສ້າງກຸຕິໃຫ້ເຮົາໄດ້ຂນາດ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ" ພິກສຸນັ້ນເພິງໄປເອງຫລືສົ່ງທູຕ

ໄປບອກວ່າ "ຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍແລະຕ້ອງມີບໍຣິເວນໂດຍຮອບ" ຯລຯ "ຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍ" ຯລຯ "ຕ້ອງເປັນພື້ນທີ່ມີບໍຣິເວນໂດຍຮອບ" ຯລຯ ບໍ່ຕ້ອງອາບັຕິ

### ສັ່ງສ້າງກຸຕິ ສົງຊ໌ສະແດງພື້ນທີ່ໃຫ້ ໄດ້ຂນາດ ເຂົາບໍ່ສ້າງຕາມສັ່ງ

[໓໖໐] ພິກສຸສັ່ງວ່າ "ຈົ່ງສ້າງກຸຕິໃຫ້ເຮົາ" ແລ້ວຫລີກໄປແລະໄດ້ສັ່ງວ່າ "ກຸຕິນັ້ນ ສົງຊ໌ຕ້ອງສະແດງພື້ນທີ່ໃຫ້ ຕ້ອງໄດ້ຂນາດ ຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍແລະຕ້ອງມີບໍຣິເວນໂດຍຮອບ" ຜູ້ຮັບຄຳສັ່ງສ້າງກຸຕິທີ່ສົງຊ໌ບໍ່ໄດ້ສະແດງພື້ນທີ່ໃຫ້ ເກີນຂນາດ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ພິກສຸນັ້ນຊາບຂ່າວວ່າ "ເຂົາສ້າງກຸຕິທີ່ສົງຊ໌ບໍ່ໄດ້ສະແດງພື້ນທີ່ໃຫ້ເຮົາ ເກີນຂນາດ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ" ທ່ານເພິ່ງໄປເອງຫລືສົ່ງທູຕໄປບອກວ່າ "ສົງຊ໌ຕ້ອງສະແດງພື້ນທີ່ໃຫ້ ຕ້ອງໄດ້ຂນາດ ຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍ ແລະຕ້ອງມີບໍຣິເວນໂດຍຮອບ" ຯລຯ "ສົງຊ໌ຕ້ອງສະແດງພື້ນທີ່ໃຫ້ ຕ້ອງໄດ້ຂນາດແລະຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍ" ຯລຯ "ສົງຊ໌ຕ້ອງສະແດງພື້ນທີ່ໃຫ້ ຕ້ອງໄດ້ຂນາດແລະຕ້ອງມີບໍຣິເວນໂດຍຮອບ" ຯລຯ "ສົງຊ໌ຕ້ອງສະແດງພື້ນທີ່ໃຫ້ແລະຕ້ອງໄດ້ຂນາດ" ຖ້າທ່ານບໍ່ໄປເອງຫລືບໍ່ສົ່ງທູຕໄປບອກ ຕ້ອງອາບັຕິທຸກກົດ

### ສັ່ງສ້າງກຸຕິ ສົງຊ໌ສະແດງພື້ນທີ່ໃຫ້ ໄດ້ຂນາດ ເຂົາສ້າງຕາມສັ່ງ

ພິກສຸສັ່ງວ່າ "ຈົ່ງສ້າງກຸຕິໃຫ້ເຮົາ" ແລ້ວຫລີກໄປ ແລະໄດ້ສັ່ງວ່າ "ກຸຕິນັ້ນສົງຊ໌ຕ້ອງສະແດງພື້ນທີ່ໃຫ້ ຕ້ອງໄດ້ຂນາດ ຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍແລະຕ້ອງມີບໍຣິເວນໂດຍຮອບ" ຜູ້ຮັບຄຳສັ່ງສ້າງກຸຕິທີ່ສົງຊ໌ສະແດງພື້ນທີ່ໃຫ້ໄດ້ຂນາດ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ພິກສຸນັ້ນຊາບຂ່າວວ່າ "ເຂົາສ້າງກຸຕິທີ່ສົງຊ໌ສະແດງພື້ນທີ່ໃຫ້ເຮົາໄດ້ຂນາດເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ" ທ່ານເພິ່ງໄປເອງຫລືສົ່ງທູຕໄປບອກວ່າ "ຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍແລະຕ້ອງມີບໍຣິເວນໂດຍຮອບ" ຯລຯ "ຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍ" ຯລຯ "ຕ້ອງເປັນພື້ນທີ່ມີບໍຣິເວນໂດຍຮອບ" ຯລຯ ບໍ່ຕ້ອງອາບັຕິ

ພິກສຸສັ່ງວ່າ "ຈົ່ງສ້າງກຸຕິໃຫ້ເຮົາ" ແລ້ວຫລີກໄປ ແຕ່ໄດ້ສັ່ງວ່າ "ກຸຕິນັ້ນສົງຊ໌ຕ້ອງສະແດງພື້ນທີ່ໃຫ້ ຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍແລະຕ້ອງມີບໍຣິເວນໂດຍຮອບ" ຜູ້ຮັບຄຳສັ່ງສ້າງກຸຕິທີ່ສົງຊ໌ບໍ່ໄດ້ສະແດງພື້ນທີ່ໃຫ້ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບພິກສຸຜູ້ສ້າງຕ້ອງອາບັຕິ

ທຸກກົຕ ໓ ຕົວ ຯລຯ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ພິກສຸຜູ້ສ້າງຕ້ອງອາບັຕິທຸກກົຕ ໔ ຕົວ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ພິກສຸຜູ້ສ້າງຕ້ອງອາບັຕິທຸກກົຕ ໔ ຕົວ ຯລຯ ເປັນພື້ນທີ່ບໍ່ມີ
ອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ພິກສຸຜູ້ສ້າງຕ້ອງອາບັຕິທຸກກົຕ

## ສ້າງຜິດຄຳສັ່ງ ສົງຊ໌ສະແດງພື້ນທີ່ໃຫ້

ພິກສຸສັ່ງວ່າ "ຈົ່ງສ້າງກຸຕິໃຫ້ເຮົາ" ແລ້ວຫລີກໄປແຕ່ໄດ້ສັ່ງວ່າ "ກຸຕິນັ້ນສົງຊ໌ຕ້ອງສະແດງພື້ນທີ່ໃຫ້ ຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍແລະຕ້ອງມີບໍຣິເວນໂດຍຮອບ" ຜູ້ຮັບຄຳສັ່ງສ້າງກຸຕິທີ່ສົງຊ໌ສະແດງພື້ນທີ່ໃຫ້ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ພິກສຸຜູ້ສ້າງຕ້ອງອາບັຕິທຸກກົຕ ໔ ຕົວ ຯລຯ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ພິກສຸຜູ້ສ້າງຕ້ອງອາບັຕິທຸກກົຕ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ພິກສຸຜູ້ສ້າງຕ້ອງອາບັຕິທຸກກົຕ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ບໍ່ຕ້ອງອາບັຕິ

## ສ້າງຜິດຄຳສັ່ງ ສ້າງເກີນຂນາດ

ພິກສຸສັ່ງວ່າ "ຈົ່ງສ້າງກຸຕິໃຫ້ເຮົາ" ແລ້ວຫລີກໄປແຕ່ໄດ້ສັ່ງວ່າ "ກຸຕິນັ້ນຕ້ອງໄດ້ຂນາດຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍແລະຕ້ອງມີບໍຣິເວນໂດຍຮອບ" ຜູ້ຮັບຄຳສັ່ງສ້າງກຸຕິໃຫ້ເກີນຂນາດ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ພິກສຸຜູ້ສ້າງຕ້ອງອາບັຕິທຸກກົຕ ໓ ຕົວ ຯລຯ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ພິກສຸຜູ້ສ້າງຕ້ອງອາບັຕິທຸກກົຕ ໔ ຕົວ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ພິກສຸຜູ້ສ້າງຕ້ອງອາບັຕິທຸກກົຕ ໔ ຕົວ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ພິກສຸຜູ້ສ້າງຕ້ອງອາບັຕິທຸກກົຕ

## ສ້າງຜິດຄຳສັ່ງ ສ້າງໄດ້ຂນາດ

ພິກສຸສັ່ງວ່າ "ຈົ່ງສ້າງກຸຕິໃຫ້ເຮົາ" ແລ້ວຫລີກໄປແລະໄດ້ສັ່ງວ່າ "ກຸຕິນັ້ນຕ້ອງໄດ້ຂນາດ ຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍແລະຕ້ອງມີບໍຣິເວນໂດຍຮອບ" ຜູ້ຮັບຄຳສັ່ງສ້າງກຸຕິໃຫ້ໄດ້ຂນາດ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ພິກສຸຜູ້ສ້າງຕ້ອງອາບັຕິທຸກກົຕ ໔ ຕົວ ຯລຯ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ພິກສຸຜູ້ສ້າງຕ້ອງອາບັຕິທຸກກົຕ ຯລຯ ເປັນພື້ນທີ່

ບໍ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ພິກສຸຜູ້ສ້າງຕ້ອງອາບັຕິທຸກກົຏ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ບໍ່ຕ້ອງອາບັຕິ

ສ້າງຜິດຄຳສັ່ງ ສົງຂ໌ບໍ່ໄດ້ສະແດງພື້ນທີ່ໃຫ້ ສ້າງເກີນຂນາດ

ພິກສຸສັ່ງວ່າ "ຈົ່ງສ້າງກຸຕິໃຫ້ເຮົາ" ແລ້ວຫລີກໄປແລະໄດ້ສັ່ງວ່າ "ກຸຕິນັ້ນສົງຂ໌ຕ້ອງສະແດງພື້ນທີ່ໃຫ້ຕ້ອງໄດ້ຂນາດ ຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍແລະຕ້ອງມີບໍຣິເວນໂດຍຮອບ" ຜູ້ຮັບຄຳສັ່ງສ້າງກຸຕິທີ່ສົງຂ໌ບໍ່ໄດ້ສະແດງພື້ນທີ່ໃຫ້ເກີນຂນາດ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ພິກສຸຜູ້ສ້າງ ຕ້ອງອາບັຕິທຸກກົຏ ໔ ຕົວ ຯລຯ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ພິກສຸຜູ້ສ້າງຕ້ອງອາບັຕິທຸກກົຏ ໓ ຕົວ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ພິກສຸຜູ້ສ້າງຕ້ອງອາບັຕິທຸກກົຏ ໓ ຕົວ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍເປັນພື້ນທີ່ມີບໍຣິເວນໂດຍຮອບ ພິກສຸຜູ້ສ້າງຕ້ອງອາບັຕິທຸກກົຏ ໔ ຕົວ

ສ້າງຜິດຄຳສັ່ງ ສົງຂ໌ສະແດງພື້ນທີ່ໃຫ້ ສ້າງໄດ້ຂນາດ

ພິກສຸສັ່ງວ່າ "ຈົ່ງສ້າງກຸຕິໃຫ້ເຮົາ" ແລ້ວຫລີກໄປແລະໄດ້ສັ່ງວ່າ "ກຸຕິນັ້ນສົງຂ໌ຕ້ອງສະແດງພື້ນທີ່ໃຫ້ຕ້ອງໄດ້ຂນາດ ຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍແລະຕ້ອງມີບໍຣິເວນໂດຍຮອບ" ຜູ້ຮັບຄຳສັ່ງສ້າງກຸຕິທີ່ສົງຂ໌ສະແດງພື້ນທີ່ໃຫ້ໄດ້ຂນາດ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ພິກສຸຜູ້ສ້າງຕ້ອງອາບັຕິທຸກກົຏ ໔ ຕົວ ຯລຯ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ພິກສຸຜູ້ສ້າງຕ້ອງອາບັຕິທຸກກົຏ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ພິກສຸຜູ້ສ້າງຕ້ອງອາບັຕິທຸກກົຏ ຯລຯ ເປັນພື້ນທີ່ບໍ່ມີອັນ ຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ບໍ່ຕ້ອງອາບັຕິ

ສົງຂ໌ບໍ່ໄດ້ສະແດງພື້ນທີ່ໃຫ້ ສ້າງຄ້າງ

[໓໕໑] ພິກສຸສັ່ງວ່າ "ຈົ່ງສ້າງກຸຕິໃຫ້ເຮົາ" ແລ້ວຫລີກໄປ ຜູ້ຮັບຄຳສັ່ງສ້າງກຸຕິທີ່ສົງຂ໌ບໍ່ໄດ້ສະແດງພື້ນທີ່ໃຫ້ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຖ້າເຂົາສ້າງຄ້າງໄວ້ ພິກສຸນັ້ນກັບມາ ເພິງໃຫ້ກຸຕິນັ້ນແກ່ພິກສຸອື່ນ ຫລືຣື້ສ້າງໃຫມ່ ຖ້າບໍ່ໃຫ້ແກ່ພິກສຸອື່ນຫລືບໍ່ຣື້ສ້າງໃຫມ່ຕ້ອງອາບັຕິທຸກກົຏ ໔ ຕົວ ກັບອາບັຕິສັງຂາທິເສສ ໑ ຕົວ

ພິກສຸສັ່ງວ່າ "ຈົ່ງສ້າງກຸຕິໃຫ້ເຮົາ" ແລ້ວຫລີກໄປ ຜູ້ຮັບຄຳສັ່ງສ້າງກຸຕິທີ່ສົງຂ໌ບໍ່ໄດ້ສະແດງພື້ນທີ່ໃຫ້ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຖ້າເຂົາສ້າງຄ້າງໄວ້ພິກສຸນັ້ນກັບມາ ເພິ່ງໃຫ້ກຸຕິນັ້ນແກ່ພິກສຸອື່ນຫລືຮື້ສ້າງໃຫມ່ ຖ້າບໍ່ໃຫ້ແກ່ພິກສຸອື່ນ ຫລືບໍ່ຮື້ສ້າງໃຫມ່ ຕ້ອງອາບັຕິທຸກກຕກັບອາບັຕິສັງຂາທິເສສ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຯລຯ ຕ້ອງອາບັຕິທຸກກຕກັບອາບັຕິສັງຂາທິ ເສສ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຯລຯ ຕ້ອງອາບັຕິສັງຂາທິເສສ

ສົງຂ໌ບໍ່ໄດ້ສະແດງພື້ນທີ່ໃຫ້ ສ້າງຄ້າງ

ພິກສຸສັ່ງວ່າ "ຈົ່ງສ້າງກຸຕິໃຫ້ເຮົາ" ແລ້ວຫລີກໄປ ຜູ້ຮັບຄຳສັ່ງສ້າງກຸຕິທີ່ສົງຂ໌ສະແດງພື້ນທີ່ໃຫ້ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຖ້າເຂົາສ້າງຄ້າງໄວ້ ພິກສຸນັ້ນກັບມາ ເພິ່ງໃຫ້ກຸຕິນັ້ນແກ່ພິກສຸອື່ນຫລືຮື້ສ້າງໃຫມ່ ຖ້າບໍ່ໃຫ້ພິກສຸອື່ນຫລືບໍ່ຮື້ສ້າງໃຫມ່ ຕ້ອງອາບັຕິທຸກກຕ ໔ ຕົວ ຯລຯ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບຕ້ອງອາບັຕິທຸກກຕ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ບໍ່ຕ້ອງອາບັຕິ

ສ້າງເກີນຂນາດ ສ້າງຄ້າງ

[໓໕໔] ພິກສຸສັ່ງວ່າ "ຈົ່ງສ້າງກຸຕິໃຫ້ເຮົາ" ແລ້ວຫລີກໄປ ຜູ້ຮັບຄຳສັ່ງສ້າງກຸຕິໃຫ້ເກີນຂນາດ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຖ້າເຂົາສ້າງຄ້າງໄວ້ພິກສຸນັ້ນກັບມາ ເພິ່ງໃຫ້ກຸຕິນັ້ນແກ່ພິກສຸອື່ນຫລືຮື້ສ້າງໃຫມ່ ຖ້າບໍ່ໃຫ້ພິກສຸອື່ນຫລືບໍ່ຮື້ສ້າງໃຫມ່ ຕ້ອງອາບັຕິທຸກກຕ ໔ ຕົວກັບອາບັຕິສັງຂາທິເສສ ໑ ຕົວ ຯລຯ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກດກັບອາບັຕິສັງຂາທິເສສ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕກັບອາບັຕິສັງຂາທິເສສ ຯລຯ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕ ໔ ຕົວ ກັບອາບັຕິສັງຂາທິເສສ ໑ ຕົວ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິສັງຂາທິເສສ

ສ້າງໄດ້ຂນາດ ສ້າງຄ້າງ

ພິກສຸສັ່ງວ່າ "ຈົ່ງສ້າງກຸຕິໃຫ້ເຮົາ" ແລ້ວຫລີກໄປ ຜູ້ຮັບຄຳສັ່ງສ້າງກຸຕິໃຫ້ໄດ້ຂນາດ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຖ້າເຂົາສ້າງຄ້າງໄວ້ ພິກສຸນັ້ນກັບມາເພິງໃຫ້ກຸຕິນັ້ນແກ່ພິກສຸອື່ນຫລືຣື້ສ້າງໃຫມ່ ຖ້າບໍ່ໃຫ້ພິກສຸອື່ນຫລືບໍ່ຣື້ສ້າງໃຫມ່ ຕ້ອງອາບັຕິທຸກກົຕ ໔ ຕົວ ຯລຯ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກົຕ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກົຕ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ບໍ່ຕ້ອງອາບັຕິ

## ສົງຄ໌ບໍ່ໄດ້ສະແດງພື້ນທີ່ໃຫ້ ສ້າງເກີນຂນາດ ສ້າງຄ້າງ

ພິກສຸສັ່ງວ່າ "ຈົ່ງສ້າງກຸຕິໃຫ້ເຮົາ" ແລ້ວຫລີກໄປ ຜູ້ຮັບຄຳສັ່ງສ້າງກຸຕິທີ່ສົງຄ໌ບໍ່ໄດ້ສະແດງພື້ນທີ່ໃຫ້ ເກີນຂນາດ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຖ້າເຂົາຄ້າງໄວ້ ພິກສຸນັ້ນກັບມາ ເພິງໃຫ້ກຸຕິນັ້ນແກ່ພິກສຸອື່ນຫລືຣື້ສ້າງໃຫມ່ ຖ້າບໍ່ໃຫ້ພິກສຸອື່ນຫລືບໍ່ຣື້ສ້າງໃຫມ່ ຕ້ອງອາບັຕິທຸກກົຕ ໔ ຕົວກັບອາບັຕິສັງຄາທິເສສ ໔ ຕົວ ຯລຯ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກົຕ ໑ ຕົວກັບອາບັຕິ ສັງຄາທິເສສ ໔ ຕົວ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງ
ອາບັຕິທຸກກົຕ ໑ ຕົວກັບອາບັຕິສັງຄາທິເສສ ໔ ຕົວ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິສັງຄາທິເສສ ໔ ຕົວ

## ສົງຄ໌ສະແດງພື້ນທີ່ໃຫ້ ສ້າງໄດ້ຂນາດ ສ້າງຄ້າງ

ພິກສຸສັ່ງວ່າ "ຈົ່ງສ້າງກຸຕິໃຫ້ເຮົາ" ແລ້ວຫລີກໄປ ຜູ້ຮັບຄຳສັ່ງສ້າງກຸຕິທີ່ສົງຄ໌ສະແດງພື້ນທີ່ໃຫ້ໄດ້ຂນາດ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຖ້າເຂົາສ້າງຄ້າງໄວ້ ພິກສຸນັ້ນກັບມາ ເພິງໃຫ້ກຸຕິນັ້ນແກ່ພິກສຸອື່ນຫລືຣື້ສ້າງໃຫມ່ ຖ້າບໍ່ໃຫ້ພິກສຸອື່ນຫລືບໍ່ຣື້ສ້າງໃຫມ່ ຕ້ອງອາບັຕິທຸກກົຕ ໔ ຕົວ ຯລຯ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກົຕ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກົຕ

ພິກສຸສັ່ງວ່າ "ຈົ່ງສ້າງກຸຕິໃຫ້ເຮົາ" ແລ້ວຫລີກໄປ ຜູ້ຮັບຄຳສັ່ງສ້າງກຸຕິທີ່ສົງຄ໌ສະແດງພື້ນທີ່ໃຫ້ໄດ້ຂນາດ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ບໍ່ຕ້ອງອາບັຕິ

ສ້າງຄ້າງ ສ້າງຕໍ່

[໓໕໓] ກຸຕິທີ່ຕົນສ້າງຄ້າງໄວ້ ພິກສຸສ້າງຕໍ່ຈົນສຳເຣັຈດ້ວຍຕົນເອງ ຕ້ອງອາບັຕິສັງຂາທິເສສ
ກຸຕິທີ່ຕົນສ້າງຄ້າງໄວ້ ພິກສຸໃຊ້ຜູ້ອື່ນສ້າງຕໍ່ຈົນສຳເຣັຈ ຕ້ອງອາບັຕິສັງຂາທິເສສ
ກຸຕິທີ່ຜູ້ອື່ນສ້າງຄ້າງໄວ້ ພິກສຸສ້າງຕໍ່ຈົນສຳເຣັຈດ້ວຍຕົນເອງ ຕ້ອງອາບັຕິສັງຂາທິເສສ
ກຸຕິທີ່ຜູ້ອື່ນສ້າງຄ້າງໄວ້ ພິກສຸໃຊ້ຜູ້ອື່ນສ້າງຕໍ່ຈົນສຳເຣັຈ ຕ້ອງອາບັຕິສັງຂາທິເສສ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໓໕໔] ໑. ພິກສຸສ້າງເງື້ອມຜາມີປະຕູ

໒. ພິກສຸທີບແຕ່ງຖ້ຳ

໓. ພິກສຸສ້າງກຸຕິຫຍ້າ

໔. ພິກສຸສ້າງກຸຕິເພື່ອພິກສຸອື່ນ

໕. ພິກສຸສ້າງອາຄາຣນອກຈາກນັ້ນ ຍົກເວັ້ນອາຄາຣທີ່ພັກຂອງຕົນ

໖. ພິກສຸວິກົລຈິຕ

໗. ພິກສຸຕົ້ນບັນຍັຕ

ກຸຕິກາຣສິກຂາບົທທີ ໖ ຈົບ

ພຣະວິນັຍປີດົກ ມຫາວິພັງຄ໌ [໔. ສັງຂາທິເສສກັນທ໌] ໗. ວິຫາຣກາຣສິກຂາບົທ ນິທານວັຕຖຸ

໗. ວິຫາຣກາຣສິກຂາບົທ

ວ່າດ້ວຍກາຣສ້າງວິຫາຣ

ເຣື້ອງພຣະສັນນະ

[໓໕໕] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ໂຂສິຕາຣາມ ເຂຕກຸງໂກສັມພີ ຄັ້ງນັ້ນ ເສດຖີຜູ້ອຸປັຕຖາກທ່ານພຣະສັນນະ ບອກທ່ານພຣະສັນນະວ່າ "ທ່ານຜູ້ຈະເຣີນ ທ່ານໂປດກວດເບິ່ງສຖານທີ່ສ້າງວິຫາຣ ຂ້າພະເຈົ້າຈັກໃຫ້ສ້າງວິຫາຣຖວາຍ" ຕໍ່ມາ ທ່ານພຣະສັນນະໃຫ້ແຜ້ວຖາງ

ສຖານທີ່ສ້າງວິຫາຣ ໃຊ້ຄົນຕັດຕົ້ນໄມ້ຣຸກຂເຈດີຍ໌ຕົ້ນນຶ່ງທີ່ຊາວບ້ານຊາວນິຄົມ ຊາວເມືອງ ຊາວຊົນບົທ ຊາວແວ່ນແຄວ້ນເຄົາຣົພບູຊາ ພວກຊາວ
ບ້ານຈຶ່ງຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະສມນະເຊື້ອສາຍສາກຍບຸຕຣຈຶ່ງໃຊ້ຄົນຕັດຕົ້ນໄມ້ຣຸກຂເຈດີຍ໌ທີ່ຊາວບ້ານ ຊາວນິຄົມ ຊາວເມືອງ ຊາວຊົນບົທ ຊາວແວ່ນແຄວ້ນເຄົາຣົພບູຊາລະ ພຣະສມນະເຊື້ອສາຍສາກຍບຸຕຣ ບຽດບຽນຕົ້ນໄມ້ຊຶ່ງມີອິນທຣີຍ໌ດຽວ" ພິກສຸທັງຫລາຍໄດ້ຍິນຊາວບ້ານຕຳຫນິ ປະນາມ ໂພນທະ ນາ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດ ທ່ານພຣະສັນນະຈຶ່ງໃຊ້ຄົນຕັດຕົ້ນໄມ້ຣຸກຂເຈດີຍ໌ທີ່ຊາວບ້ານ ຯລຯ ຊາວແວ່ນແຄວ້ນເຄົາຣົພບູຊາລະ" ຄັນພິກສຸເຫລົ່ານັ້ນຕຳຫນິທ່ານພຣະສັນນະໂດຍປະການຕ່າງໆ ແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັຕສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມພິກສຸສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະສັນນະວ່າ "ສັນນະ ຊາບວ່າ ທ່ານໃຊ້ຄົນຕັດຕົ້ນໄມ້ຣຸກຂເຈດີຍ໌ທີ່ຊາວບ້ານ ຊາວນິຄົມ ຊາວເມືອງ ຊາວຊົນບົທ ຊາວແວ່ນແຄວ້ນເຄົາຣົພບູຊາແມ່ນແທ້ບໍ" ທ່ານພຣະສັນນະທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ໂມຂບຸຣຸສຈັ່ງໃດທ່ານຈຶ່ງໃຊ້ຄົນຕັດຕົ້ນໄມ້ຣຸກຂເຈດີຍ໌ທີ່ຊາວບ້ານ ຊາວນິຄົມ ຊາວເມືອງ ຊາວຊົນບົທ ຊາວແວ່ນແຄວ້ນເຄົາຣົພບູຊາລະ ໂມຂບຸຣຸສ ເພາະພວກຊາວບ້ານມີຄວາມສຳຄັນວ່າ 'ຕົ້ນໄມ້ມີຊີວະ' ໂມຂບຸຣຸສ ການກະທຳຢ່າງນີ້ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງ ດັ່ງນີ້

ພຣະບັນຍັຕ

[ລ໖໖] ກໍ ພິກສຸຈະສ້າງວິຫາຣໃຫຍ່ ທີ່ມີເຈົ້າຂອງສ້າງຖວາຍ ສ້າງເປັນຂອງສ່ວນຕົວ ຕ້ອງພາພິກສຸທັງຫລາຍໄປສະແດງພື້ນທີ່ໃຫ້ ພິກສຸເຫລົ່ານັ້ນເພິງສະແດງພື້ນທີ່ໃຫ້ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຖ້າພິກສຸໃຫ້ສ້າງວິຫາຣໃຫຍ່ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຫລືບໍ່ພາພິກສຸທັງຫລາຍໄປສະແດງພື້ນທີ່ໃຫ້ ເປັນສັງຂາທິເສສ

ເຣື້ອງພຣະສັນນະ ຈົບ

## ສິກຂາບົທວິພັງຄ໌

[໓໖໗] ວິຫາຣທີ່ຊື່ວ່າ ໃຫຍ່ ໄດ້ແກ່ ວິຫາຣມີເຈົ້າຂອງສ້າງຖວາຍ
ຊື່ວ່າ ວິຫາຣ ໄດ້ແກ່ ທີ່ຢູ່ຊຶ່ງໂບກເຄືອບພາຍໃນຫລືພາຍນອກຫລືໂບກເຄືອບທັງພາຍໃນພາຍນອກ
ຄຳວ່າ ສ້າງ ຄື ສ້າງເອງຫລືໃຊ້ຄົນອື່ນສ້າງ
ຄຳວ່າ ທີ່ມີເຈົ້າຂອງສ້າງຖວາຍ ຄື ທີ່ມີຍິງຫລືຊາຍ ຄຣືຫັສຖ໌ຫລືບັພຊິຕ ເປັນເຈົ້າຂອງສ້າງຖວາຍ
ຄຳວ່າ ສ້າງເປັນຂອງສ່ວນຕົວ ຄື ເພື່ອປໂຍດຕົນ
ຄຳວ່າ ຕ້ອງພາພິກສຸທັງຫລາຍໄປສະແດງພື້ນທີ່ໃຫ້ ອທິບາຍວ່າ ພິກສຸຜູ້ຈະສ້າງວິຫາຣນັ້ນ ເພິງໃຫ້ແຜ້ວຖາງພື້ນທີ່ສ້າງວິຫາຣແລ້ວເຂົ້າໄປຫາສົງຂ໌ ຫົ່ມຜ້າບ່ຽງບ່າ ຂາບຕີນພິກສຸຜູ້ແກ່ພັນສາກວ່າ ນັ່ງຄຸເຂົ່າປະນົມມື ກ່າວ ຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຜູ້ຂ້າຕ້ອງກາຣຈະສ້າງວິຫາຣໃຫຍ່ ມີເຈົ້າຂອງສ້າງຖວາຍ ສ້າງເປັນຂອງສ່ວນຕົວ ຜູ້ຂ້າຂໍໃຫ້ສົງຂ໌ກວດເບິ່ງພື້ນທີ່ສ້າງວິຫາຣ ຂນ້ອຍ" ເພິງກ່າວຂໍພິກສຸທັງຫລາຍດັ່ງນີ້ເປັນຄັ້ງທີ ໒ ເພິງກ່າວຂໍພິກສຸທັງຫລາຍດັ່ງນີ້ເປັນທີ ໓ ຖ້າສົງຂ໌ທັງປວງສາມາດໄປກວດເບິ່ງພື້ນທີ່ສ້າງວິຫາຣໄດ້ ກໍຕ້ອງໄປກວດເບິ່ງດ້ວຍກັນທຸກຮູບ ຖ້າສົງຂ໌ທັງປວງບໍ່ສາມາດຈະໄປກວດເບິ່ງພື້ນທີ່ສ້າງວິຫາຣໄດ້ຫມົດທຸກຮູບ ກໍຕ້ອງຂໍພວກພິກສຸທີ່ສລາດສາມາດຮູ້ຈັກພື້ນທີ່ ວ່າເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ແລ້ວແຕ່ງຕັ້ງ

### ພຣະວິນັຍປິດົກ ມຫາວິພັງຄ໌ [໔. ສັງຂາທິເສສກັນຫ໌] ໗. ວິຫາຣກາຣສິກຂາບົທ ສິກຂາບົທວິພັງຄ໌

### ວິທີແຕ່ງຕັ້ງ ແລະກັມວາຈາແຕ່ງຕັ້ງ

ພິກສຸທັງຫລາຍ ສົງຂ໌ເພິງແຕ່ງຕັ້ງຢ່າງນີ້ ຄື ພິກສຸຜູ້ສລາດສາມາດເພິງປະກາດໃຫ້ສົງຂ໌ຊາບວ່າ

[໓໖໘] ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ພິກສຸຊື່ນີ້ຕ້ອງກາຣຈະສ້າງວິຫາຣໃຫຍ່ທີ່ມີເຈົ້າຂອງສ້າງຖວາຍ ສ້າງເປັນຂອງສ່ວນຕົວ ພິກສຸນັ້ນຂໍໃຫ້ສົງຂ໌ກວດເບິ່ງພື້ນທີ່ສ້າງວິຫາຣ ຖ້າສົງຂ໌

ພ້ອມກັນແລ້ວ ເພິງແຕ່ງຕັ້ງພິກສຸຊື່ນີ້ແລະຊື່ນີ້ ໃຫ້ກອດເບິ່ງທີ່ສ້າງວິຫານໃຫ້ແກ່ພິກສຸຊື່ນີ້ ນີ້ເປັນ ຍັດຕິ

ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ພິກສຸຊື່ນີ້ຕ້ອງການຈະສ້າງວິຫານໃຫຍ່ ທີ່ມີເຈົ້າຂອງສ້າງ ຖວາຍ ສ້າງເປັນຂອງສ່ວນຕົວ ພິກສຸນັ້ນຂໍໃຫ້ສົງຂ໌ກອດເບິ່ງພື້ນທີ່ສ້າງວິຫານສົງຂ໌ແຕ່ງຕັ້ງພິກສຸຊື່ ນີ້ແລະຊື່ນີ້ ໃຫ້ກອດເບິ່ງພື້ນທີ່ສ້າງວິຫານໃຫ້ແກ່ພິກສຸຊື່ນີ້ ທ່ານຮູບໃດເຫັນດ້ວຍກັບການແຕ່ງຕັ້ງ ພິກສຸຊື່ນີ້ແລະຊື່ນີ້ ໃຫ້ກອດເບິ່ງພື້ນທີ່ສ້າງວິຫານໃຫ້ແກ່ພິກສຸຊື່ນີ້ ທ່ານຮູບນັ້ນເພິງນິ່ງ ທ່ານຮູບ ໃດບໍ່ເຫັນດ້ວຍ ທ່ານຮູບນັ້ນເພິງທັກທ້ວງ ພິກສຸຊື່ນີ້ແລະຊື່ນີ້ສົງຂ໌ແຕ່ງຕັ້ງໃຫ້ເປັນຜູ້ກອດເບິ່ງ ພື້ນທີ່ສ້າງວິຫານໃຫ້ແກ່ພິກສຸຊື່ນີ້ ສົງຂ໌ເຫັນດ້ວຍ ເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືຄວາມນິ່ງນັ້ນ ເປັນມຕິຢ່າງນີ້

ວິທີຂໍສົງຂ໌ສະແດງພື້ນທີ່ສ້າງວິຫານ

[໑໘໙] ພິກສຸທັງຫລາຍທີ່ໄດ້ຮັບແຕ່ງຕັ້ງເຫລົ່ານັ້ນ ຕ້ອງໄປທີ່ນັ້ນແລ້ວເພິງກອດເບິ່ງພື້ນທີ່ສ້າງ ວິຫານ ໃຫ້ຮູ້ວ່າ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຖ້າເປັນພື້ນທີ່ມີອັນຕຣາຍທັງບໍ່ມີບໍຣິເວນໂດຍຮອບ ເພິງບອກ ພິກສຸຮູບນັ້ນວ່າ “ຢ່າສ້າງໃນທີ່ນີ້” ຖ້າເປັນພື້ນທີ່ບໍ່ມີອັນຕຣາຍທັງມີບໍຣິເວນໂດຍຮອບ ເພິງ ບອກສົງຂ໌ວ່າ “ເປັນພື້ນທີ່ບໍ່ມີອັນຕຣາຍທັງມີບໍຣິເວນໂດຍຮອບ” ພິກສຸຜູ້ຈະສ້າງວິຫານນັ້ນເພິງເຂົ້າ ໄປຫາສົງຂ໌ ຫົ່ມຜ້າບ່ຽງບ່າ ຂາບຕີນພິກສຸຜູ້ແກ່ພັນສາກວ່າ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ “ທ່ານ ຜູ້ຈະເຣີນ ຜູ້ຂ້າຕ້ອງການສ້າງວິຫານໃຫຍ່ ທີ່ມີເຈົ້າຂອງສ້າງຖວາຍ ສ້າງເປັນຂອງສ່ວນຕົວ ຜູ້ຂ້າຂໍ ໃຫ້ສົງຂ໌ສະແດງພື້ນທີ່ສ້າງວິຫານ” ເພິງກ່າວຂໍພິກສຸທັງຫລາຍດັ່ງນີ້ເປັນຄັ້ງທີ ໒ ເພິງກ່າວຂໍພິກສຸ ທັງຫລາຍດັ່ງນີ້ເປັນຄັ້ງທີ ໓

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ສັງຂາທິເສສກັນຖ໌] ໗. ວິຫານການສິກຂາບົທ ສິກຂາບົທວິ ພັງຄ໌

ກັມວາຈາຂໍໃຫ້ສົງຂ໌ສະແດງພື້ນທີ່ສ້າງວິຫານ

ພິກສຸຜູ້ສລາດສາມາດເພິງປະກາດໃຫ້ສົງຊ໌ຊາບ ດັ່ງນີ້

[໓໗໐] ທ່ານຜູ້ຈະເຣີນ ຂໍສົງຊ໌ຈົ່ງຟັງຂ້າພະເຈົ້າ ພິກສຸຊື່ນີ້ຕ້ອງການຈະສ້າງວິຫານໃຫຍ່ທີ່ມີເຈົ້າຂອງສ້າງຖວາຍ ສ້າງເປັນຂອງສ່ວນຕົວ ພິກສຸນັ້ນຂໍໃຫ້ສົງຊ໌ສະແດງພື້ນທີ່ສ້າງວິຫານ ຖ້າສົງຊ໌ພ້ອມກັນແລ້ວ ເພິງໄປສະແດງພື້ນທີ່ສ້າງວິຫານໃຫ້ແກ່ພິກສຸຊື່ນີ້ ນີ້ເປັນຍັຕຕິທ່ານຜູ້ຈະເຣີນ ຂໍສົງຊ໌ຈົ່ງຟັງຂ້າພະເຈົ້າ ພິກສຸຊື່ນີ້ຕ້ອງການຈະ ສ້າງວິຫານໃຫຍ່ທີ່ມີເຈົ້າຂອງສ້າງຖວາຍ ສ້າງເປັນຂອງສ່ວນຕົວ ພິກສຸນັ້ນຂໍໃຫ້ສົງຊ໌ສະແດງພື້ນທີ່ສ້າງວິຫານ
ສົງຊ໌ສະແດງພື້ນທີ່ສ້າງວິຫານໃຫ້ແກ່ພິກສຸຊື່ນີ້ ທ່ານຮູບໃດເຫັນດ້ວຍກັບການສະແດງພື້ນທີ່ສ້າງວິຫານໃຫ້ແກ່ພິກສຸຊື່ນີ້ ທ່ານຮູບນັ້ນເພິງນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນເພິງທັກທ້ວງ ພື້ນທີ່ສ້າງວິຫານສົງຊ໌ສະແດງໃຫ້ແກ່ພິກສຸຊື່ນີ້ແລ້ວ ສົງຊ໌ເຫັນດ້ວຍ ເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືເອົາຄວາມນິ່ງນັ້ນເປັນມຕິຢ່າງນີ້

[໓໗໑] ທີ່ຊື່ວ່າ ເປັນພື້ນທີ່ມີອັນຕຣາຍ ຄື ເປັນທີ່ຢູ່ຂອງມົດ ເປັນທີ່ຢູ່ຂອງປວກ ເປັນທີ່ຢູ່ຂອງຫນູ ເປັນທີ່ຢູ່ຂອງງູ ເປັນທີ່ຢູ່ຂອງແມງປ່ອງ ເປັນທີ່ຢູ່ຂອງຂີ້ເຂັບ ເປັນທີ່ຢູ່ຂອງຊ້າງ ເປັນທີ່ຢູ່ຂອງມ້າ ເປັນທີ່ຢູ່ຂອງຣາຊສີຫ໌ ເປັນທີ່ຢູ່ຂອງເສືອໂຄ່ງ ເປັນທີ່ຢູ່ຂອງເສືອເຫລືອງ ເປັນທີ່ຢູ່ຂອງຫມີ ເປັນທີ່ຢູ່ຂອງສຸນັກປ່າ ຫລືເປັນທີ່ຢູ່ຂອງສັຕວ໌ເດັຽຣະສານບາງເຫລົ່າ ຢູ່ໃກ້ນາ ຢູ່ໃກ້ສວນ ຢູ່ໃກ້ທາງສີ່ແຍກ(ບ່ອນປະຫານນັກໂທດ) ຢູ່ໃກ້ທີ່ທໍຣມານນັກໂທສູ ຢູ່ໃກ້ສຸສານ ຢູ່ໃກ້ອຸທຍານ ຢູ່ໃກ້ທີ່ຫລວງ ຢູ່ໃກ້ໂຮງຊ້າງ ຢູ່ໃກ້ໂຮງມ້າ ຢູ່ໃກ້ເຮືອນຈໍາ ຢູ່ໃກ້ໂຮງສຸຣາ ຢູ່ໃກ້ຮ້ານຂາຍຊີ້ນ ຢູ່ໃກ້ຖນົນ ຢູ່ໃກ້ທາງສີ່ແຍກ(ບ່ອນປະຫານນັກໂທດ) ຢູ່ໃກ້ທີ່ປະຊຸມ ຫລືຢູ່ໃກ້ທາງເດີນ ນີ້ຊື່ວ່າ ພື້ນທີ່ມີອັນຕຣາຍ

ທີ່ຊື່ວ່າ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຄື ກວຽນທີ່ເຂົາທຽມງົວຕາມປົກຕິບໍ່ສາມາດ່ອນໄປໄດ້ ຂັ້ນໄດບໍ່ສາມາດຈະທອດວຽນໄປໄດ້ໂດຍຮອບ ນີ້ຊື່ວ່າ ພື້ນທີ່ບໍ່ມີບໍຣິເວນໂດຍຮອບ
ທີ່ຊື່ວ່າ ເປັນພື້ນທີ່ບໍ່ມີອັນຕຣາຍ ຄື ບໍ່ແມ່ນທີ່ຢູ່ຂອງມົດ ຯລຯ ບໍ່ໃກ້ທາງເດີນ ນີ້ຊື່ວ່າ ພື້ນທີ່ບໍ່ມີອັນຕຣາຍ

ທີ່ຊື່ວ່າ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຄື ກວຽນທີ່ເຂົາທຽມງົວຕາມປົກຕິສາມາດວນໄປໄດ້ ຂັ້ນໄດສາມາດທອດວຽນໄປໄດ້ໂດຍຮອບ ນີ້ຊື່ວ່າ ພື້ນທີ່ມີບໍຣິເວນໂດຍຮອບ
ວິຫານທີ່ຊື່ວ່າ ໃຫຍ່ ຄື ວິຫານທີ່ມີເຈົ້າຂອງ

ທີ່ຊື່ວ່າ ວິຫາຣ ໄດ້ແກ່ ທີ່ຢູ່ຊຶ່ງໂບກເຄືອບສະເພາະພາຍໃນຫລືພາຍນອກ ຫລືໂບກເຄືອບທັງພາຍໃນພາຍນອກ

ຄຳວ່າ ສ້າງ ຄື ສ້າງເອງຫລືໃຊ້ຄົນອື່ນສ້າງ

ຄຳວ່າ ບໍ່ພາພິກສຸທັງຫລາຍໄປສະແດງພື້ນທີ່ໃຫ້ ຄື ບໍ່ຂໍໃຫ້ສົງຄ໌ສະແດງພື້ນທີ່ສ້າງວິຫາຣດ້ວຍຍັຕຕິທຸຕິຍກັມວາຈາກ່ອນ ສ້າງເອງຫລືໃຊ້ຄົນອື່ນສ້າງ ຕ້ອງອາບັຕິທຸກກຕ ເພາະຄວາມພຍາຍາມແຕ່ລະຄັ້ງ ຍັງເຫລືອອີດອີກກ້ອນນຶ່ງຈຶ່ງຈະແລ້ວ ຕ້ອງອາບັຕິຖຸລລັຈຈັຍ ອິດກ້ອນສຸດທ້າຍເສັດແລ້ວ ຕ້ອງອາບັຕິສັງຄາທິເສສ

ຄຳວ່າ ເປັນສັງຄາທິເສສ ຄວາມວ່າ ສຳລັບອາບັຕິນັ້ນ ສົງຄ໌ເທົ່ານັ້ນໃຫ້ປຣິວາສ ຯລຯ ເພາະເຫຕຸນັ້ນ ຈຶ່ງຕຣັສຮຽກວ່າ "ເປັນສັງຄາທິເສສ"

## ບົທພາຊນີຍ໌
## ສົງຄ໌ບໍ່ໄດ້ສະແດງພື້ນທີ່ໃຫ້

[໓໗໔] ພິກສຸສ້າງວິຫາຣທີ່ສົງຄ໌ບໍ່ໄດ້ສະແດງພື້ນທີ່ໃຫ້ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍ ຮອບ ຕ້ອງອາບັຕິທຸກກຕ ໔ ຕົວກັບອາບັຕິສັງຄາທິເສສ ໑ ຕົວ

ພິກສຸສ້າງວິຫາຣທີ່ສົງຄ໌ບໍ່ໄດ້ສະແດງພື້ນທີ່ໃຫ້ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕກັບອາບັຕິສັງຄາທິເສສ

ພິກສຸສ້າງວິຫາຣທີ່ສົງຄ໌ບໍ່ໄດ້ສະແດງພື້ນທີ່ໃຫ້ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕກັບອາບັຕິສັງຄາທິເສສ

ພິກສຸສ້າງວິຫາຣທີ່ສົງຄ໌ບໍ່ໄດ້ສະແດງພື້ນທີ່ໃຫ້ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິສັງຄາທິເສສ

## ສົງຄ໌ສະແດງພື້ນທີ່ໃຫ້

ພິກສຸສ້າງວິຫາຣທີ່ສົງຄ໌ສະແດງພື້ນທີ່ໃຫ້ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕ ໔ ຕົວ

ພິກສຸສ້າງວິຫາຣທີ່ສົງຂ໌ສະແດງພື້ນທີ່ໃຫ້ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກົຕ

ພິກສຸສ້າງວິຫາຣທີ່ສົງຂ໌ສະແດງພື້ນທີ່ໃຫ້ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກົຕ

ພິກສຸສ້າງວິຫາຣທີ່ສົງຂ໌ສະແດງພື້ນທີ່ໃຫ້ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ບໍ່ຕ້ອງອາບັຕິ

## ສັ່ງສ້າງວິຫາຣ ສົງຂ໌ບໍ່ໄດ້ສະແດງພື້ນທີ່ໃຫ້

[໓໗໓] ພິກສຸສັ່ງວ່າ "ຈົ່ງສ້າງວິຫາຣໃຫ້ເຮົາ" ຜູ້ຮັບຄຳສັ່ງສ້າງວິຫາຣທີ່ສົງຂ໌ບໍ່ໄດ້ສະແດງພື້ນທີ່ໃຫ້ ເປັນພື້ນ ທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກົຕ ໔ ຕົວກັບອາບັຕິສັງຂາທິເສສ ໑ ຕົວ ຯລຯ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກົຕກັບອາບັຕິສັງຂາທິເສສ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກົຕກັບອາບັຕິສັງຂາທິເສສ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິສັງຂາທິເສສ

## ສັ່ງສ້າງວິຫາຣ ສົງຂ໌ສະແດງພື້ນທີ່ໃຫ້

ພິກສຸສັ່ງວ່າ "ຈົ່ງສ້າງວິຫາຣໃຫ້ເຮົາ" ຜູ້ຮັບຄຳສັ່ງສ້າງວິຫາຣທີ່ສົງຂ໌ສະແດງພື້ນທີ່ໃຫ້ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກົຕ ໔ ຕົວ ຯລຯ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກົຕ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກົຕ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ບໍ່ຕ້ອງອາບັຕິ

## ຫລີກໄປ ບໍ່ໄດ້ສັ່ງ ສົງຂ໌ບໍ່ໄດ້ສະແດງພື້ນທີ່ໃຫ້

[໓໗໔] ພິກສຸສັ່ງວ່າ "ຈົ່ງສ້າງວິຫາຣໃຫ້ເຮົາ" ແລ້ວຫລີກໄປ ແຕ່ບໍ່ໄດ້ສັ່ງວ່າ "ວິຫາຣນັ້ນ ສົງຂ໌ຕ້ອງສະແດງພື້ນທີ່ໃຫ້ ຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍແລະຕ້ອງມີບໍຣິເວນໂດຍຮອບ" ຜູ້ຮັບຄຳສັ່ງ

ສ້າງວິຫາຣທີ່ສົງຂ໌ບໍ່ໄດ້ສະແດງພື້ນທີ່ໃຫ້ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕ ໔ ຕົວກັບອາບັຕິສັງຂາທິເສສ ໑ ຕົວ ຯລຯ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕກັບອາບັຕິສັງຂາທິເສສ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕກັບ ອາບັຕິສັງຂາທິເສສ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິສັງຂາທິເສສ

ຫລີກໄປ ບໍ່ໄດ້ສັ່ງ ສົງຂ໌ສະແດງພື້ນທີ່ໃຫ້

ພິກສຸສັ່ງວ່າ “ຈົ່ງສ້າງວິຫາຣໃຫ້ເຮົາ” ແລ້ວຫລີກໄປແຕ່ບໍ່ໄດ້ສັ່ງໄວ້ວ່າ “ວິຫາຣນັ້ນສົງຂ໌ຕ້ອງສະແດງພື້ນທີ່ໃຫ້ ຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍແລະຕ້ອງມີບໍຣິເວນໂດຍຮອບ” ຜູ້ຮັບຄຳສັ່ງສ້າງວິຫາຣທີ່ສົງຂ໌ສະແດງພື້ນທີ່ໃຫ້ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບຕ້ອງອາບັຕິທຸກກຕ ໔ ຕົວ ຯລຯ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ບໍ່ຕ້ອງອາບັຕິ

ສ້າງຜິດຄຳສັ່ງ ສົງຂ໌ບໍ່ໄດ້ສະແດງພື້ນທີ່ໃຫ້

[ໝກ໕] ພິກສຸສັ່ງວ່າ “ຈົ່ງສ້າງວິຫາຣໃຫ້ເຮົາ” ແລ້ວຫລີກໄປ ແຕ່ໄດ້ສັ່ງວ່າ “ວິຫາຣນັ້ນສົງຂ໌ຕ້ອງສະແດງພື້ນທີ່ໃຫ້ ຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍແລະຕ້ອງມີບໍຣິເວນໂດຍຮອບ” ຜູ້ຮັບຄຳສັ່ງສ້າງວິຫາຣທີ່ສົງຂ໌ບໍ່ໄດ້ສະແດງພື້ນທີ່ໃຫ້ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ພິກສຸນັ້ນຊາບຂ່າວວ່າ “ເຂົາສ້າງວິຫາຣທີ່ສົງຂ໌ບໍ່ໄດ້ສະແດງພື້ນທີ່ໃຫ້ເຮົາ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ” ພິກສຸນັ້ນເພິ່ງໄປເອງຫລືສົ່ງທູຕໄປບອກວ່າ “ວິຫາຣນັ້ນສົງຂ໌ຕ້ອງສະແດງພື້ນທີ່ໃຫ້ ຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍແລະຕ້ອງມີບໍຣິເວນໂດຍຮອບ” ຖ້າບໍ່ໄປເອງຫລືບໍ່ສົ່ງທູຕໄປບອກ ຕ້ອງອາບັຕິທຸກກຕ ຯລຯ ວິຫາຣນັ້ນສົງຂ໌ຕ້ອງສະແດງພື້ນທີ່ໃຫ້ແລະຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍ ຯລຯ ວິຫາຣນັ້ນສົງຂ໌ຕ້ອງສະແດງພື້ນທີ່ໃຫ້ແລະຕ້ອງມີບໍຣິເວນໂດຍຮອບ ຯລຯ ວິຫາຣນັ້ນສົງຂ໌ຕ້ອງສະແດງພື້ນທີ່ໃຫ້ ຫາກບໍ່ໄປເອງຫລືບໍ່ສົ່ງທູຕໄປບອກ ຕ້ອງອາບັຕິທຸກກຕ

ສ້າງຜິດຄຳສັ່ງ ສົງຂ໌ສະແດງພື້ນທີ່ໃຫ້

ພິກສຸສັ່ງວ່າ "ຈົ່ງສ້າງວິຫາຣໃຫ້ເຮົາ" ແລ້ວຫລີກໄປ ແລະໄດ້ສັ່ງວ່າ "ວິຫາຣນັ້ນສົງຊ໌ຕ້ອງສະແດງພື້ນທີ່ໃຫ້ ຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍແລະຕ້ອງມີບໍຣິເວນໂດຍຮອບດ້ວຍ ຜູ້ຮັບຄຳສັ່ງສ້າງວິຫາຣທີ່ສົງຊ໌ສະແດງພື້ນທີ່ໃຫ້ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ພິກສຸນັ້ນຊາບຂ່າວວ່າ "ເຂົາສ້າງວິຫາຣທີ່ສົງຊ໌ສະແດງພື້ນທີ່ໃຫ້ເຮົາ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ" ພິກສຸນັ້ນເພິ່ງໄປເອງຫລືເພິ່ງສົ່ງທູຕໄປບອກວ່າ "ວິຫາຣນັ້ນຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍແລະຕ້ອງມີບໍຣິເວນໂດຍຮອບ" ຯລຯ "ຕ້ອງເປັນທີ່ບໍ່ມີອັນຕຣາຍ" ຯລຯ "ຕ້ອງມີບໍຣິເວນໂດຍຮອບ" ຯລຯ ບໍ່ຕ້ອງອາບັຕິ

## ສ້າງຜິດຄຳສັ່ງ ສົງຊ໌ບໍ່ໄດ້ສະແດງພື້ນທີ່ໃຫ້

[໓໗໕] ພິກສຸສັ່ງວ່າ "ຈົ່ງສ້າງວິຫາຣໃຫ້ເຮົາ" ແລ້ວຫລີກໄປ ແຕ່ໄດ້ສັ່ງວ່າ "ວິຫາຣນັ້ນສົງຊ໌ຕ້ອງສະແດງພື້ນທີ່ໃຫ້ ຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍແລະຕ້ອງມີບໍຣິເວນໂດຍຮອບ" ຜູ້ຮັບຄຳສັ່ງສ້າງວິຫາຣທີ່ສົງຊ໌ບໍ່ໄດ້ສະແດງພື້ນທີ່ໃຫ້ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ພິກສຸຜູ້ສ້າງຕ້ອງອາບັຕິທຸກກຕ ໓ ຕົວ ຯລຯ ເປັນພື້ນທີ່ມີອັນຕຣາຍເປັນພື້ນທີ່ມີບໍຣິເວນໂດຍຮອບ ພິກສຸຜູ້ສ້າງຕ້ອງອາບັຕິທຸກກຕ ໒ ຕົວ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ພິກສຸຜູ້ສ້າງຕ້ອງອາບັຕິທຸກກຕ ໒ ຕົວ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ພິກສຸຜູ້ສ້າງຕ້ອງອາບັຕິທຸກກຕ

## ສ້າງຜິດຄຳສັ່ງ ສົງຊ໌ສະແດງພື້ນທີ່ໃຫ້

ພິກສຸສັ່ງວ່າ "ຈົ່ງສ້າງວິຫາຣໃຫ້ເຮົາ" ແລ້ວຫລີກໄປ ແຕ່ໄດ້ສັ່ງວ່າ "ວິຫາຣນັ້ນສົງຊ໌ຕ້ອງສະແດງພື້ນທີ່ໃຫ້ ຕ້ອງເປັນພື້ນທີ່ບໍ່ມີອັນຕຣາຍແລະຕ້ອງມີບໍຣິເວນໂດຍຮອບ" ຜູ້ຮັບຄຳສັ່ງສ້າງວິຫາຣທີ່ສົງຊ໌ສະແດງພື້ນທີ່ໃຫ້ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ພິກສຸຜູ້ສ້າງຕ້ອງອາບັຕິທຸກກຕ ໒ ຕົວ ຯລຯ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ພິກສຸຜູ້ສ້າງຕ້ອງອາບັຕິທຸກກຕ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ພິກສຸຜູ້ສ້າງຕ້ອງອາບັຕິທຸກກຕ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ບໍ່ຕ້ອງອາບັຕິ

## ສົງຊ໌ບໍ່ໄດ້ສະແດງພື້ນທີ່ໃຫ້ ສ້າງຄ້າງ

[໓໗໗] ພິກສຸສັ່ງວ່າ "ຈົ່ງສ້າງວິຫາຣໃຫ້ເຮົາ" ແລ້ວຫລີກໄປ ຜູ້ຮັບຄຳສັ່ງສ້າງວິຫາຣທີ່ສົງຊ໌ບໍ່ໄດ້ສະແດງພື້ນທີ່ໃຫ້ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຖ້າເຂົາສ້າງຄ້າງໄວ້ພິກສຸນັ້ນກັບມາ ເພິງໃຫ້ວິຫາຣນັ້ນແກ່ພິກສຸອື່ນຫລືຮື້ສ້າງໃຫມ່ ຖ້າບໍ່ໃຫ້ພິກສຸອື່ນຫລືບໍ່ຮື້ສ້າງໃຫມ່ ຕ້ອງອາບັຕິທຸກກຕ ໔ ຕົວ ກັບອາບັຕິສັງຄາທິເສສ ໑ ຕົວ ຯລຯ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕກັບອາບັຕິສັງຄາທິເສສ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕກັບອາບັຕິສັງຄາທິເສສ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິສັງຄາທິເສສ

## ສົງຊ໌ສະແດງພື້ນທີ່ໃຫ້ ສ້າງຄ້າງ

ພິກສຸສັ່ງວ່າ "ຈົ່ງສ້າງວິຫາຣໃຫ້ເຮົາ" ແລ້ວຫລີກໄປ ຜູ້ຮັບຄຳສັ່ງສ້າງວິຫາຣທີ່ສົງຊ໌ສະແດງພື້ນທີ່ໃຫ້ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຖ້າເຂົາສ້າງຄ້າງໄວ້ພິກສຸນັ້ນກັບມາ ເພິງໃຫ້ວິຫາຣນັ້ນແກ່ພິກສຸອື່ນຫລືຮື້ສ້າງໃຫມ່ ຖ້າບໍ່ໃຫ້ພິກສຸອື່ນຫລືບໍ່ຮື້ສ້າງໃຫມ່ ຕ້ອງອາບັຕິທຸກກຕ ໔ ຕົວ ຯລຯ ເປັນພື້ນທີ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ບໍ່ມີບໍຣິເວນໂດຍຮອບ ຕ້ອງອາບັຕິທຸກກຕ ຯລຯ ເປັນພື້ນທີ່ບໍ່ມີອັນຕຣາຍ ເປັນພື້ນທີ່ມີບໍຣິເວນໂດຍຮອບ ບໍ່ຕ້ອງອາບັຕິ

## ສ້າງຄ້າງ ສ້າງຕໍ່

[໓໗໘] ວິຫາຣຕົນສ້າງຄ້າງໄວ້ ພິກສຸສ້າງຕໍ່ຈົນສຳເຣັຈດ້ວຍຕົນເອງ ຕ້ອງອາບັຕິສັງຄາທິເສສ
ວິຫາຣຕົນສ້າງຄ້າງໄວ້ ພິກສຸໃຊ້ຜູ້ອື່ນສ້າງຕໍ່ຈົນສຳເຣັຈ ຕ້ອງອາບັຕິສັງຄາທິເສສ
ວິຫາຣຜູ້ອື່ນສ້າງຄ້າງໄວ້ ພິກສຸສ້າງຕໍ່ຈົນສຳເຣັຈດ້ວຍຕົນເອງ ຕ້ອງອາບັຕິສັງຄາທິເສສ
ວິຫາຣຜູ້ອື່ນສ້າງຄ້າງໄວ້ ພິກສຸໃຊ້ຜູ້ອື່ນສ້າງຕໍ່ຈົນສຳເຣັຈ ຕ້ອງອາບັຕິສັງຄາທິເສສ

## ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໓໗໙] ໑. ພິກສຸສ້າງເງື້ອມຜາມີປະຕູ

໔. ພິກສຸຕົບແຕ່ງຖ້ຳ

໓. ພິກຂຸສ້າງກຸຕິຫຍ້າ
໔. ພິກຂຸສ້າງວິຫາຣເພື່ອພິກຂຸອື່ນ
໕. ພິກຂຸສ້າງອາຄາຣນອກຈາກນັ້ນ ຍົກເວັ້ນອາຄາຣທີ່ພັກຂອງຕົນ
໖. ພິກຂຸວິກົລຈິຕ
໗. ພິກຂຸຕົ້ນບັນຍັຕ

ວິຫາຣກາຣສິກຂາບົທທີ ໗ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ສັງຂາທິເສສກັນຫ໌] ໗໘. ປຖມທຸດຖໂທສສິກຂາບົທ ນິທານ ວັຕຖຸ

໗໘. ປຖມທຸຕຖໂທສສິກຂາບົທ

ວ່າດ້ວຍພິກຂຸຂັດເຄືອງມີໂທສະ ສິກຂາບົທທີ ໑

ເຣື້ອງພຣະທັພພມັລລບຸຕຣ

[໓໗໐] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເວຣຸວັນ ສຖານທີ່ໃຫ້ເຫຍື່ອກະແຕ ເຂຕກຸງຣາຊຄຶຫ໌ ຄັ້ງນັ້ນ ທ່ານພຣະທັພພມັລລບຸຕຣ ບັນລຸອຣຫັຕຕຜົລເມື່ອອາຍຸ ໗ ຂວບ ຄຸນວິເສສຢ່າງໃດຢ່າງນຶ່ງທີ່ພຣະສາວົກເພິງບັນລຸ ທ່ານກໍໄດ້ບັນລຸແລ້ວທັງຫມົດ ບໍ່ມີກິຈອື່ນໃດ ທີ່ຈະເພິງກະທຳຍິ່ງກວ່ານີ້ ຫລືກິຈທີ່ເຮັດເສັດແລ້ວທີ່ຈະກະທຳເພີ່ມເຕີມອີກກໍບໍ່ມີ ຕໍ່ມາ ທ່ານພຣະທັພພມັລລບຸຕຣຫລີກຫລີບຢູ່ໃນທີ່ສງັດ ເກີດຄວາມຄິດຄຳນຶງຢ່າງນີ້ວ່າ ເຮົາໄດ້ບັນລຸອຣຫັຕຜລເມື່ອອາຍຸ ໗ ຂວບ ຄຸນວິເສສຢ່າງໃດຢ່າງນຶ່ງທີ່ພຣະ
ສາວົກເພິງບັນລຸ ເຮົາກໍໄດ້ບັນລຸແລ້ວທັງຫມົດ ບໍ່ມີກິຈກັມອື່ນໃດ ທີ່ຈະເພິງກະທຳຍິ່ງໄປກວ່ານີ້ ຫລືກິຈ
ທີ່ກະທຳເສັດແລ້ວຊຶ່ງຈະກະທຳເພີ່ມເຕີມອີກກໍບໍ່ມີ ເຮົາຄວຣຊ່ວຍຫຍັງສົງຂ໌ໄດ້ແດ່
ລຳດັບນັ້ນ ທ່ານຕົກລົງໃຈວ່າ "ຖ້າຢ່າງນັ້ນ ເຮົາຄວຣຈັດແຈງເສນາສນະແລະແຈກພັຕຕາຫາຣແກ່ສົງຂ໌" ຄັນອອກຈາກທີ່ຫລີກຫລີບໃນເວລາແລງແລ້ວ ໄດ້ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຄັນເຖິງແລ້ວໄດ້ຖວາຍບັງຄົມພຣະຜູ້ມີພຣະພາຄແລ້ວນັ່ງລົງ ນະ ທີ່ສົມຄວຣແລ້ວໄດ້ຂາບທູລພຣະຜູ້ມີພຣະພາຄດັ່ງນີ້ວ່າ "ພຣະພຸທທເຈົ້າຂ້າ ຂ້າພຣະພຸທທເຈົ້າຫລີກຫລີບຢູ່ໃນທີ່ສງັດ ມີ

ຄວາມຄິດຢ່າງນີ້ວ່າ 'ເຮົາໄດ້ບັນລຸອຣຫັຕຕຜົລເມື່ອອາຍຸ ໆ ຂວບ ໆລໆ ຫລືກິຈທີ່ກະທຳເສັດ ແລ້ວຊຶ່ງຈະກະທຳເພີ່ມເຕີມອີກກໍ່ບໍ່ມີ ເຮົາຄວຣຊ່ວຍຫຍັງສົງຂ໌ໄດ້ແດ່' ພຣະພຸທທເຈົ້າຂ້າ ຖ້າຢ່າງໃດ ຂ້າພຣະພຸທທເຈົ້າ ເພິງຈັດແຈງເສນາສນະແລະແຈກພັຕຕາຫາຣແກ່ສົງຂ໌ ຂ້າພຣະພຸທທເຈົ້າປຣາຖນາຈະຈັດແຈງເສນາສນະແລະແຈກພັຕຕາຫາຣແກ່ສົງຂ໌" ພຣະຜູ້ມີພຣະພາຄຕຣັສວ່າ "ດີແລ້ວ ດີແລ້ວ ທັພພະ ຖ້າຢ່າງນັ້ນ ທ່ານຈົ່ງຈັດແຈງເສນາສນະແລະແຈກພັຕຕາຫາຣແກ່ສົງຂ໌" ພຣະທັພພມັລລບຸຕຣຂາບທູລຮັບສນອງພຣະພຸທທດຳຣັສແລ້ວ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ສັງຂາທິເສສກັນທ໌] ໆ. ປຖມທຸດຖໂທສສິກຂາບົທ ນິທານວັຕຖຸ

ແຕ່ງຕັ້ງເສນາສນປັຢຢາປກະແລະພັຕຕຸທເທສກະ໑

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ແລ້ວຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ຖ້າເຊັ່ນນັ້ນ ສົງຂ໌ຈົງແຕ່ງຕັ້ງທັພພມັລລບຸຕຣໃຫ້ເປັນເສນາສນປັຢຢາປກະແລະພັຕຕຸທເທສກະ

ວິທີແຕ່ງຕັ້ງ ແລະກັມວາຈາແຕ່ງຕັ້ງ

ພິກສຸທັງຫລາຍ ສົງຂ໌ເພິງແຕ່ງຕັ້ງຢ່າງນີ້ ຄື ເບື້ອງຕົ້ນເພິງຂໍໃຫ້ທັພພມັລລບຸຕຣຮັບ ຄັນແລ້ວພິກສຸຜູ້ສລາດສາມາດ ເພິງປະກາດໃຫ້ສົງຂ໌ຊາບວ່າ

[ຍັຕ໑] ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ຖ້າສົງຂ໌ພ້ອມກັນແລ້ວ ເພິງແຕ່ງຕັ້ງທ່ານພຣະທັພພມັລລບຸຕຣໃຫ້ເປັນເສນາສນປັຢຢາປກະແລະພັຕຕຸທເທສກະ ນີ້ເປັນຍັຕຕິ ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ສົງຂ໌ແຕ່ງຕັ້ງພຣະທັພພມັລລບຸຕຣໃຫ້ເປັນເສນາສນປັຢຢາປກະແລະພັຕຕຸທເທສກະ ທ່ານຮູບໃດເຫັນດ້ວຍກັບການແຕ່ງຕັ້ງພຣະທັພພມັລລບຸຕຣໃຫ້ເປັນເສນາສນປັຢຢາປກະແລະພັຕຕຸທເທສກະ ທ່ານຮູບນັ້ນເພິງນິ່ງຢູ່ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນເພິງທັກທ້ວງ

ພຣະທັພພມັລລບຸຕຣ ສົງຂ໌ແຕ່ງຕັ້ງໃຫ້ເປັນເສນາສນປັຢຢາປກະແລະພັຕຕຸທເທສກະແລ້ວ ສົງຂ໌ເຫັນດ້ວຍ ເພາະສະນັ້ນຈຶ່ງນິ່ງຢູ່ ຂ້າພະເຈົ້າຂໍຖືຄວາມນິ່ງນັ້ນເປັນມຕິຢ່າງນີ້"

[໓໘໔] ກໍແລ ທ່ານພຣະທັພພມັລລບຸຕຣ ໄດ້ຮັບແຕ່ງຕັ້ງແລ້ວຍ່ອມຈັດແຈງເສນາສນະ ສໍາລັບຫມູ່ພິກສຸຜູ້ມີຄຸນສົມບັດສເມີກັນຮວມໄວ້ບ່ອນດຽວກັນ ດັ່ງນີ້ ຄື ຈັດແຈງເສນາສນະສໍາລັບພິກສຸຜູ້ຊົງພຣະສູຕຣຮວມກັນໄວ້ແຫ່ງນຶ່ງ ດ້ວຍປະສົງຄ໌ວ່າ ພິກສຸເຫລົ່ານັ້ນຈັກຊັກຊ້ອມພຣະສູຕຣກັນ ຈັດແຈງເສນາສນະສໍາລັບພິກສຸຜູ້ຊົງພຣະວິນັຍຮວມກັນໄວ້ແຫ່ງນຶ່ງ ດ້ວຍປະສົງຄ໌ວ່າພິກສຸເຫລົ່ານັ້ນຈັກວິນິຈສັຍພຣະວິນັຍກັນ ຈັດແຈງເສນາສນະສໍາລັບພິກສຸຜູ້ຊົງພຣະອພິທັມຮວມກັນໄວ້ແຫ່ງນຶ່ງ ດ້ວຍປະສົງຄ໌ວ່າ ພິກສຸເຫລົ່ານັ້ນຈັກສົນທນາພຣະອພິທັມກັນ ຈັດແຈງເສນາສນະສໍາລັບພິກສຸຜູ້ໄດ້ຍານຮວມກັນໄວ້ແຫ່ງນຶ່ງ ດ້ວຍປະສົງຄ໌ວ່າພິກສຸເຫລົ່ານັ້ນຈັກບໍ່ຣົບກວນກັນ ຈັດແຈງເສນາສນະສໍາລັບພິກສຸຜູ້ຊອບກ່າວຕິຣັຈສານກຖາ ຜູ້ມາກໄປດ້ວຍການບໍາຣຸງຮ່າງກາຍຮວມກັນໄວ້ແຫ່ງນຶ່ງ ດ້ວຍປະສົງຄ໌ວ່າ ພິກສຸເຫລົ່ານີ້ຈະຢູ່ຕາມຄວາມພໍໃຈ ທ່ານພຣະທັພພມັລລບຸຕຣນັ້ນເຂົ້າເຕໂຊກສິນະ ແລ້ວຈັດແຈງເສນາສນະດ້ວຍແສງສວ່າງນັ້ນສໍາລັບພິກສຸທີ່ມາໃນເວລາຄໍ່າຄືນ ພິກສຸທັງຫລາຍຈົງໃຈມາໃນເວລາຄໍ່າຄືນ ດ້ວຍປະສົງຄ໌ວ່າ "ພວກເຮົາຈະຊົມອິທຫິປາຕິຫາຣິຍ໌ຂອງທ່ານພຣະທັພພມັລລບຸຕຣ" ກໍມີ ພວກທ່ານພາກັນເຂົ້າໄປຫາທ່ານພຣະທັພພມັລລບຸຕຣ ກ່າວວ່າ "ທ່ານຈົ່ງຈັດແຈງເສນາສນະໃຫ້ພວກຜູ້ຂ້າ" ທ່ານພຣະທັພພມັລລບຸຕຣກ່າວວ່າ "ທ່ານທັງຫລາຍຕ້ອງການພັກທີ່ໃດລະ ຂ້າພະເຈົ້າຈະຈັດແຈງໃນທີ່ໃດ" ພິກສຸເຫລົ່ານັ້ນຈົງໃຈອ້າງທີ່ໄກໆ ວ່າ "ທ່ານຈົ່ງຈັດແຈງເສນາສນະໃຫ້ພວກຜູ້ຂ້າທີ່ພູເຂົາຄິຊຍັກູຕ...ທີ່ເຫວສໍາລັບຖິ້ມໂຈຣ...ທີ່ການຣສິລາຂ້າງພູເຂົາອິສີຄິລິ...ທີ່ຖໍ້າສັຕຕບຣຣນຄູຫາຂ້າງພູເຂົາເວພາຣະ...ທີ່ເງື້ອມເຂົາສັປປໂສນທິກະໃກ້ສີຕວັນ...ທີ່ຊອກເຂົາໂຄຕມກະ...ທີ່ຊອກເຂົາຕິນທຸກະ...ທີ່ຊອກເຂົາຕໂປທກະ...ທີ່ຕໂປທາຣາມ...ທີ່ຊີວກັມພວັນ...ທ່ານຈົ່ງຈັດແຈງເສນາສນະ ໃຫ້ພວກຜູ້ຂ້າທີ່ມັທທກຸຈສິມຣິຄທາຍວັນ" ທ່ານພຣະທັພພມັລລບຸຕຣເຂົ້າເຕໂຊກສິນະ ໃຊ້ອງຄຸລີສ່ອງແສງສວ່າງເດີນນໍາຫນ້າພິກສຸເຫລົ່ານັ້ນ ທ່ານເຫລົ່ານັ້ນເດີນຕາມພຣະທັພພມັລລບຸຕຣໄປດ້ວຍແສງສວ່າງນັ້ນ ທ່ານໄດ້ຈັດແຈງເສນາສນະສໍາລັບພິກສຸເຫລົ່ານັ້ນ ຊີ້ແຈງວ່າ "ນີ້ຕຽງ ນີ້ຕັ່ງ ນີ້ເສື່ອ ນີ້ຫມອນ ນີ້ທີ່ຖ່າຍອຸຈຈາຣະ ນີ້ທີ່ຖ່າຍປັສສາວະ ນີ້ນໍ້າສັນ ນີ້ນໍ້າໃຊ້ ນີ້ໄມ້ເທົ້າ ນີ້ຣະບຽບກຕິກາ ສົງຄ໌ ຄວຣເຂົ້າເວລານີ້ ຄວຣອອກເວລານີ້" ຄັນຈັດແຈງເສັດແລ້ວຈຶ່ງກັບມາພຣະເວຣຸວັນວິຫາຣຕາມເດີມ

ເຣື່ອງພຣະທັພພມັລລບຸຕຣ ຈົບ

## ພຣະວິນັຍປິຎົກ ມຫາວິພັງຄ໌ [໔. ສັງຄຸາທິເສສກັນຫ໌] ໗. ປຖຸມທຸດຖຸໄທສສິກຂາບົທ ນິທານ ວັຕຖຸ

### ເຣື້ອງພຣະເມຕຕິຍະແລະພຣະພຸມມຊກະ

[໓໗໓] ກໍສມັຍນັ້ນ ພຣະເມຕຕິຍະແລະພຣະພຸມມຊກະ ເປັນພຣະບວຊໃຫມ່ແລະມີບຸນຫນ້ອຍ ເສນາສນະຂອງສົງຂ໌ຊັ້ນຕ່ຳ ອາຫານກໍຊັ້ນຕ່ຳ ຕົກເຖິງທ່ານທັງສອງ ຊາວກຸງຣາຊຄຶຫ໌ຕ້ອງການຈະຖວາຍບິນທບາຕແກ່ພຣະເຖຣະທັງຫລາຍກໍຖວາຍເນີຍໃສແດ່ ນ້ຳມັນແດ່ ແກງອ່ອມແດ່ ຈັດປຸງພິເສສ ແຕ່ພວກເຂົາຖວາຍ ອາຫານທັມດາແກ່ພຣະເມຕຕິຍະແລະພຣະພຸມມຊກະ ຕາມແຕ່ຈະຫາໄດ້ ຄືປາຍເຂົ້າກັບນ້ຳຜັກດອງ ມື້ນຶ່ງ ທ່ານທັງສອງກັບຈາກບິນທບາຕຫລັງຈາກສັນເສັດແລ້ວ ຫຽວຖາມພິກສຸເຖຣະວ່າ "ມີອາຫານຫຍັງແດ່ ໃນໂຮງສັນສຳລັບພວກທ່ານ" ພຣະເຖຣະບາງພວກຕອບວ່າ "ຄຸນທັງສອງ ພວກເຮົາມີເນີຍໃສ ນ້ຳມັນ ແກງອ່ອມ" ພຣະເມຕຕິຍະແລະພຣະພຸມມຊກະ ກ່າວວ່າ "ພວກຜູ້ຂ້າບໍ່ມີຫຍັງເລີຍ ຂນ້ອຍ ມີແຕ່ອາຫານທັມດາ ຕາມແຕ່ຈະຫາໄດ້ ຄືປາຍເຂົ້າກັບນ້ຳຜັກດອງ" ສມັຍຕໍ່ມາ ຄຫບໍດີຜູ້ຊອບຖວາຍອາຫານຢ່າງດີ ຖວາຍອາຫານແກ່ສົງຂ໌ວັນລະ ໔ ທີ່ ເປັນນິຕຍພັຕ ຄຫບໍດີພ້ອມບຸຕຣພັຣຍາອັງຄາສ ຢູ່ໃກ້ໆໃນໂຮງສັນ ຄົນອື່ນໆ ຖາມເຖິງຄວາມຕ້ອງການເຂົ້າສຸກ ຖາມເຖິງຄວາມຕ້ອງການກັບເຂົ້າ ຖາມເຖິງຄວາມຕ້ອງການນ້ຳມັນ ຖາມເຖິງຄວາມຕ້ອງການແກງອ່ອມ ວັນຕໍ່ມາ ທ່ານພຣະທັພພມັລລບຸຕຣຜູ້ເປັນພັຕຕຸທເທສກ໌ນິມົນຕ໌ພຣະເມຕຕິຍະແລະພຣະພຸມມຊກະໄປສັນພັຕຕາ ຫານຂອງຄຫບໍດີໃນວັນຮຸ່ງຂຶ້ນ ວັນດຽວກັນນັ້ນ ຄຫບໍດີເດີນທາງໄປອາຣາມດ້ວຍທຸຣະບາງຢ່າງ ໄດ້ເຂົ້າໄປຫາທ່ານພຣະທັພພມັລລບຸຕຣເຖິງສຳນັກ ຄັນເຖິງແລ້ວໄດ້ໄຫວ້ທ່ານພຣະທັພພມັລລບຸຕຣແລ້ວ ນັ່ງລົງ ນະ ທີ່ສົມຄວຣ ທ່ານທັພພມັລລບຸຕຣຊີ້ແຈງຄຫບໍດີຜູ້ຊອບຖວາຍອາຫານຢ່າງດີໃຫ້ເຫັນແຈ້ງ ຊວນໃຫ້ຢາກຮັບໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນເບີກບານດ້ວຍທັມມີກຖາ ຄັນແລ້ວ ຄຫບໍດີຜູ້ຊອບຖວາຍອາຫານຢ່າງດີຖາມວ່າ "ພັຕຕາຫານທີ່ຈະຖວາຍໃນມື້ອື່ນນີ້ທີ່ເຮືອນຂອງຂ້າພະເຈົ້າ ທ່ານນິມົນຕ໌ພິກສຸຮູບໃດໄປສັນຂນ້ອຍ" ທ່ານພຣະທັພພມັລລບຸຕຣຕອບວ່າ "ອາຕມາຈັດໃຫ້ພຣະເມຕຕິຍະແລະພຣະພຸມມຊກະ ໄປສັນ" ເຂົາບໍ່ພໍໃຈວ່າ "ເປັນຫຍັງຈຶ່ງນິມົນຕ໌ພິກສຸຊົ່ວໄປສັນພັຕຕາຫານໃນບ້ານເຮົາລະ" ກັບໄປບ້ານແລ້ວສັ່ງຍິງຮັບໃຊ້ວ່າ "ແມ່ສາວໃຊ້ ມື້ອື່ນນີ້ ເຈົ້າຈົ່ງຈັດອາສນະໄວ້ທີ່ຊຸ້ມປະຕູແລ້ວເອົາປາຍເຂົ້າກັບນ້ຳຜັກດອງຖວາຍພິກສຸຜູ້ມາສັນພັຕຕາຫານເດີ" ຍິງຮັບໃຊ້ຮັບຄຳວ່າ "ໄດ້ຂະນ້ອຍ" ມື້ດຽວກັນນັ້ນ ພຣະເມຕຕິຍະແລະພຣະພຸມມຊກະກ່າວກັນວ່າ "ທ່ານ ມື້ວານນີ້ເຮົາໄດ້

ຮັບນິມົນຕ໌ໄປສັນພັຕຕາຫານໃນເຮືອນຄຫບໍດີ ມື້ອື່ນນີ້ ຄຫບໍດີພ້ອມດ້ວຍບຸດຣພັຣຍາກໍຈັກມາຢືນອັງຄາສເຮົາຢູ່ໃກ້ໆ ຄົນອື່ນຖາມເຖິງຄວາມຕ້ອງການເຂົ້າສຸກ ຖາມເຖິງຄວາມຕ້ອງການກັບເຂົ້າ ຖາມເຖິງຄວາມຕ້ອງການນ້ຳມັນ ຖາມເຖິງຄວາມຕ້ອງການແກງອ່ອມ" ເພາະຄວາມດີໃຈນັ້ນ ພໍຕົກກາງຄືນ ທ່ານທັງສອງຈຶ່ງຈຳວັດຫລັບບໍ່ເຕັມທີ່ ຄັນເວລາເຊົ້າ ຄອງອັນຕຣວາສກ ຖືບາຕຣແລະຈີວອນຍ່າງໄປເຖິງນິເວສນ໌ຂອງຄຫບໍດີ ຍິງຮັບໃຊ້ເບິ່ງເຫັນພຣະເມຕຕິຍະແລະພຣະພຸມມຊກະຍ່າງມາແຕ່ໄກ ຈຶ່ງຈັດອາສນະໄວ້ທີ່ຊຸ້ມປະຕູນິມົນຕ໌ວ່າ "ພຣະຄຸນເຈົ້າ ນິມົນຕ໌ນັ່ງເຖີດ ຂະນ້ອຍ" ພຣະເມຕຕິຍະແລະພຣະພຸມມຊກະຄິດວ່າ "ເຂົາຄົງນິມົນຕ໌ໃຫ້ພວກເຮົານັ່ງຖ້າທີ່ຊຸ້ມປະຕູຈົນກວ່າພັຕຕາຫານຈະແລ້ວເສັດ" ຂນະນັ້ນຍິງຮັບໃຊ້ນຳປາຍເຂົ້າກັບນ້ຳຜັກດອງໄປຖວາຍ ກ່າວວ່າ "ພຣະຄຸນເຈົ້າ ນິມົນຕ໌ສັນເຖີດ ຂະນ້ອຍ" ທ່ານທັງສອງກ່າວວ່າ "ນ້ອງຍິງ ພວກອາຕມາຮັບນິມົນຕ໌ມາສັນນິຕຍພັຕ" ຍິງຮັບໃຊ້ຕອບວ່າ "ຊາບຂະນ້ອຍວ່າທ່ານເປັນພຣະຮັບນິມົນຕ໌ມາສັນນິຕຍພັຕ ແຕ່ມື້ວານນີ້ ຄຫບໍດີສັ່ງໄວ້ວ່າ 'ແມ່ສາວໃຊ້ ມື້ອື່ນນີ້ ເຈົ້າຈົ່ງຈັດອາສນະໄວ້ທີ່ຊຸ້ມປະຕູ ແລ້ວເອົາປາຍເຂົ້າກັບນ້ຳຜັກດອງຖວາຍພິກສຸຜູ້ມາສັນພັຕຕາຫານະ' ນິມົນຕ໌ສັນເຖີດ ຂະນ້ອຍ" ພຣະເມຕຕິຍະແລະພຣະພຸມມຊກະປຶກສາກັນວ່າ "ມື້ວານນີ້ເອງ ຄຫບໍດີໄປຫາພຣະທັພພມັລລບຸດຣເຖິງອາຣາມ ສົງສັຍພວກເຮົາຄົງຖືກພຣະທັພພມັລລບຸດຣທຳລາຍຕໍ່ຫນ້າຄຫບໍດີເປັນແນ່" ເພາະຄວາມເສັຽໃຈ ທ່ານທັງສອງຈຶ່ງສັນພັຕຕາຫານບໍ່ໄດ້ສົມໃຈ ຄັນກັບຈາກບິນທບາຕຫລັງຈາກສັນເສັດແລ້ວ ເຖິງອາຣາມ ເກັບບາຕຣແລະຈີວອນແລ້ວໃຊ້ຜ້າສັງຂາຕິຮັດເຂົ່າ ນັ່ງພາຍນອກຊຸ້ມປະຕູອາຣາມ ອັດອັ້ນ ເກີ້ເຂີນ ຄໍຕົກກົ້ມຫນ້າ ຊຶມເຊົາ ບໍ່ເວົ້າຈາ

## ພຣະວິນັຍປິດົກ ມຫາວິພັງຄ໌ [໔. ສັງຂາທິເສສກັນທ໌] ໗. ປຖມທຸດຖໂທສສິກຂາບົທ ນິທານວັຕຖຸ

### ພິກສຸນີເມຕຕິຍາໃສ່ຄວາມພຣະທັພພມັລລບຸດຣ

ຄັ້ງນັ້ນ ພິກສຸນີເມຕຕິຍາເຂົ້າໄປຫາພຣະເມຕຕິຍະແລະພຣະພຸມມຊກະເຖິງທີ່ພັກ ຄັນເຖິງແລ້ວໄດ້ກ່າວກັບພຣະເມຕຕິຍະແລະພຣະພຸມມຊກະ ດັ່ງນີ້ວ່າ "ພຣະຄຸນເຈົ້າ ຂະນ້ອຍໄຫວ້ ຂະນ້ອຍ" ເມື່ອທ່ານກ່າວຢ່າງນັ້ນ ພຣະເມຕຕິຍະແລະພຸມມຊກະກໍບໍ່ເວົ້າດ້ວຍ ທ່ານຈຶ່ງກ່າວວ່າ "ຂະນ້ອຍໄຫວ້ຂະນ້ອຍ" ແມ່ນຄັ້ງທີ ໒ ຯລຯ ແມ່ນຄັ້ງທີ ໓ ພຣະເມຕຕິຍະແລະພຣະພຸມມຊກະກໍບໍ່ຍອມເວົ້ານຳ

ດ້ວຍ ພິກສຸນີເມຕຕິຍາ ກ່າວຕໍ່ໄປວ່າ “ຂະນ້ອຍທຳຜິດຢ່າງໃດຕໍ່ພຣະຄຸນເຈົ້າ ເປັນຫຍັງພຣະຄຸນເຈົ້າຈຶ່ງບໍ່ຍອມເວົ້າກັບຂະນ້ອຍ” ພິກສຸທັງສອງຕອບວ່າ “ຈິງຢ່າງນັ້ນແຫລະ ນ້ອງຍິງ ພວກເຮົາຖືກພຣະທັພພມັລລບຸຕຣບຽດບຽນ ທ່ານຍັງເພີກເສີຍຢູ່ໄດ້” ພິກສຸນີເມຕຕິຍາຖາມວ່າ “ຂະນ້ອຍຈະຊ່ວຍໄດ້ຢ່າງໃດ ຂະນ້ອຍ” ພິກສຸທັງສອງຕອບວ່າ “ຖ້າທ່ານເຕັມໃຈຊ່ວຍ ວັນນີ້ແຫລະພຣະຜູ້ມີພຣະພາຄຕ້ອງໃຫ້ພຣະທັພພມັລລບຸຕຣສິກ” ພິກສຸນີເມຕຕິຍາຖາມວ່າ “ພຣະຄຸນເຈົ້າ ຂະນ້ອຍຈະເຮັດຢ່າງໃດ ຈະຊ່ວຍໄດ້ດ້ວຍວິທີໃດ” ພິກສຸທັງສອງຕອບວ່າ “ມາເຖີດ ນ້ອງຍິງ ທ່ານຈົ່ງເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຄັນເຖິງແລ້ວ ຈົ່ງຂາບທູລພຣະຜູ້ມີພຣະພາຄ ຢ່າງນີ້ວ່າ “ພຣະພຸທທເຈົ້າຂ້າ ເຣື້ອງນີ້ບໍ່ສົມຄວຣ ບໍ່ເຫມາະສົມ ທິສທີ່ເຄີຍປອດພັຍກໍກັບມີພັຍ ທີ່ທີ່ບໍ່ເຄີຍມີສນຽດ ຈັງໄຮກໍກັບມີສນຽດຈັງໄຮ ທິສທີ່ບໍ່ເຄີຍມີອຸປັທທວະກໍກັບມີອຸປັທທວະ ໃນທີ່ທີ່ບໍ່ເຄີຍມີລົມ ກໍກັບມີລົມແຮງ ນ້ຳກໍເບິ່ງເປັນຄືນ້ຳຮ້ອນຂຶ້ນມາ ຂະນ້ອຍຖືກພຣະທັພພມັລລບຸຕຣຂົ່ມຂືນ” ພິກສຸນີເມຕຕິຍາຮັບຄຳຂອງພຣະເມຕຕິຍະແລະພຣະພຸມມຊກະແລ້ວຈຶ່ງເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຄັນເຖິງແລ້ວ ໄດ້ຖວາຍບັງຄົມພຣະຜູ້ມີພຣະພາຄແລ້ວຢືນຢູ່ ນະ ທີ່ສົມຄວຣ ໄດ້ຂາບທູລພຣະຜູ້ມີພຣະພາຄ ດັ່ງນີ້ວ່າ “ເຣື້ອງນີ້ບໍ່ສົມຄວຣ ຯລຯ ຂະນ້ອຍຖືກພຣະທັພພມັລລບຸຕຣຂົ່ມຂືນ”

## ຊົງປະຊຸມສົງຂ໌ສອບຖາມ

[ລັກ຺໔] ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະທັພພມັລລບຸຕຣວ່າ “ທັພພະ ທ່ານຈຳໄດ້ບໍ່ວ່າໄດ້ທຳຕາມທີ່ພິກສຸນີນີ້ກ່າວຫາ” ທ່ານພຣະທັພພມັລລບຸຕຣຂາບທູລວ່າ “ພຣະພຸທທເຈົ້າຂ້າ ພຣະຜູ້ມີພຣະພາຄຍ່ອມຊົງຊາບວ່າ ຂ້າພຣະພຸທທເຈົ້າເປັນຢ່າງໃດ” ແມ່ນຄັ້ງທີ ໔ ພຣະຜູ້ມີພຣະພາຄໄດ້ຕຣັສຖາມທ່ານພຣະທັພພມັລລບຸຕຣ ຯລຯ ແມ່ນຄັ້ງທີ ລັ ຕຣັສຖາມທ່ານພຣະທັພພມັລລບຸຕຣວ່າ “ທັພພະ ທ່ານຈຳໄດ້ບໍ່ວ່າໄດ້ທຳຕາມທີ່ພິກສຸນີນີ້ກ່າວຫາ” ພຣະທັພພມັລລບຸຕຣກໍຂາບທູລວ່າ “ພຣະພຸທທເຈົ້າຂ້າ ພຣະຜູ້ມີພຣະພາຄຍ່ອມຊົງຊາບວ່າ ຂ້າພຣະພຸທທເຈົ້າເປັນຢ່າງໃດ” “ທັພພະ ບັນທິຕຍ່ອມບໍ່ແກ້ຄຳກ່າວຫາຢ່າງນີ້ ຖ້າທ່ານທຳກໍຈົ່ງບອກວ່າທຳ ຖ້າທ່ານບໍ່ໄດ້ທຳ ກໍຈົ່ງບອກວ່າບໍ່ໄດ້ທຳ” “ພຣະພຸທທເຈົ້າຂ້າ ຕັ້ງແຕ່ເກີດມາ ຂ້າພຣະພຸທທເຈົ້າບໍ່ຮູ້ຈັກການເສພເມຖຸນທັມແມ່ນແຕ່ໃນຄວາມຝັນ ບໍ່ຈຳເປັນຕ້ອງກ່າວເຖິງເມື່ອຕອນຕື່ນຢູ່”

ລຳດັບນັ້ນ ພຣະຜູ້ມີພຣະພາຄຕຣັສຮຽກພິກສຸທັງຫລາຍມາຮັບສັ່ງວ່າ “ພິກສຸທັງຫລາຍ ຖ້າຢ່າງນັ້ນ

ທ່ານທັງຫລາຍຈົ່ງໃຫ້ນາງພິກສຸນີເມຕຕິຍາສິກ ຈົ່ງສອບຖາມພິກສຸເຫລົ່ານີ້" ແລ້ວສເດັຈຈາກທີ່ປະທັບເຂົ້າພຣະວິຫາຣ

ຫລັງຈາກນັ້ນ ພິກສຸທັງຫລາຍຈຶ່ງໃຫ້ນາງພິກສຸນີເມຕຕິຍາສິກ ແຕ່ພຣະເມຕຕິຍະແລະພຣະພຸມມຊຸກະໄດ້ແຈ້ງພິກສຸທັງຫລາຍວ່າ "ທ່ານທັງຫລາຍຢ່າໃຫ້ນາງພິກສຸນີເມຕຕິຍາສິກເລີຍ ນາງບໍ່ມີຄວາມຜິດ ພວກຜູ້ຂ້າໂກດ ບໍ່ພໍໃຈ ຕ້ອງການໃຫ້ພຣະທັພພມັລລບຸຕຣພົ້ນຈາກພຣົມຈັນຍ໌ ຈຶ່ງຊັກຈູງນາງ" ພິກສຸທັງຫລາຍກ່າວວ່າ "ທ່ານທັງຫລາຍ ພວກທ່ານໃສ່ຄວາມພຣະທັພພມັລລບຸຕຣດ້ວຍອາບັຕິປາຣາຊິກ ທີ່ບໍ່ມີມູລຫລື"

### ພຣະເມຕຕິຍະແລະພຣະພຸມມຊຸກະຍອມຮັບສາຣພາພ

ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະເມຕຕິຍະແລະພຣະພຸມມຊຸກະຈຶ່ງໃສ່ຄວາມທ່ານພຣະທັພພມັລລບຸຕຣດ້ວຍອາບັຕິປາຣາຊິກທີ່ບໍ່ມີມູລລະ" ຄັນພິກສຸເຫລົ່ານັ້ນຕຳຫນິພຣະເມຕຕິຍະແລະພຣະພຸມມຊຸກະໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລແດ່ພຣະຜູ້ມີພຣະພາຄໃຫ້ຊົງຊາບ

### ພຣະວິນັຍປິດົກ ມຫາວິພັງຄ໌ [໔. ສັງຂາທິເສສກັນຫ໌] ໗. ປຖມທຸດຖໂທສສິກຂາບົທ ສິກຂາບົທວິພັງຄ໌

### ຊົງປະຊຸມສົງຂ໌ບັນຍັຕສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພຣະເມຕຕິຍະແລະພຣະພຸມມຊຸກະວ່າ "ພິກສຸທັງຫລາຍ ຊາບວ່າ ທ່ານທັງສອງໃສ່ຄວາມທັພພມັລລບຸຕຣ ດ້ວຍອາບັຕິປາຣາຊິກທີ່ບໍ່ມີມູລແມ່ນແທ້ບໍ" ພິກສຸເຫລົ່ານັ້ນທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ໂມຂບຸຣຸສທັງຫລາຍ ຈັ່ງໃດພວກທ່ານ ຈຶ່ງໃສ່ຄວາມທັພພມັລລບຸຕຣດ້ວຍອາບັຕິປາຣາຊິກທີ່ບໍ່ມີມູລລະ ໂມຂບຸຣຸສທັງຫລາຍ ການກະທຳຢ່າງນີ້ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງ ດັ່ງນີ້

### ພຣະບັນຍັຕ

[໓໗໕] ກໍ ພິກສຸໃດ ຂັດເຄືອງ ມີໂທສະ ບໍ່ສິດຊື່ນ ໃສ່ຄວາມພິກສຸດ້ວຍອາບັຕິປາຣາຊິກທີ່ບໍ່ມີມູລ ໂດຍມຸ່ງຫມາຍວ່າ "ເຮັດຢ່າງໃດຈຶ່ງຈະໃຫ້ພິກສຸນັ້ນພົ້ນຈາກພຣົມຈັນຍ໌ນີ້ໄດ້" ຄັນສມັຍຕໍ່ຈາກນັ້ນ ອັນຜູ້ໃດຜູ້ນຶ່ງໂຈທ ກໍຕາມບໍ່ໂຈທກໍຕາມ ອທິກຣນ໌(ບັນຫາຂອງສົງຂ໌)ນັ້ນເປັນເຣື່ອງບໍ່ມີມູລ ແລະ ພິກສຸຍອມຮັບຜິດ ເປັນສັງຂາທິ ເສສ

ເຣື້ອງພຣະເມຕຕິຍະແລະພຣະພຸມມຊກະ ຈົບ

ສິກຂາບົທວິພັງຄ໌

[໓໗໖] ຄໍາວ່າ ກໍ...ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ...ໃດ
ຄໍາວ່າ ພິກສຸ ມີອທິບາຍວ່າ ທີ່ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ ເອົາວ່າ ພິກສຸ ໃນຄວາມຫມາຍນີ້
ຄໍາວ່າ ພິກສຸ ຫມາຍເຖິງ ພິກສຸອື່ນ
ຄໍາວ່າ ຂັດເຄືອງ ມີໂທສະ ຄື ໂກດ ບໍ່ພໍໃຈ ບໍ່ຊອບໃຈ ແຄ້ນໃຈ ເຈັບໃຈ
ຄໍາວ່າ ບໍ່ສິດຊື່ນ ຄື ບໍ່ສິດຊື່ນເພາະຄວາມໂກດນັ້ນ ເພາະມີໂທສະນັ້ນ ເພາະບໍ່ພໍໃຈນັ້ນ ແລະເພາະບໍ່ ຊອບໃຈນັ້ນ

ຊື່ວ່າ ທີ່ບໍ່ມີມູລ ຄືບໍ່ໄດ້ເຫັນ ບໍ່ໄດ້ຍິນ ບໍ່ໄດ້ນຶກສົງສັຍ
ຄໍາວ່າ ດ້ວຍອາບັຕິປາຣາຊິກ ຄື ດ້ວຍອາບັຕິປາຣາຊິກ ໔ ຂໍ້ໃດຂໍ້ນຶ່ງ
ຄໍາວ່າ ໃສ່ຄວາມ ໄດ້ແກ່ ໂຈທເອງ ຫລືສັ່ງໃຫ້ຜູ້ອື່ນໂຈທ
ຄໍາວ່າ ເຮັດຢ່າງໃດຈຶ່ງຈະໃຫ້ພິກສຸນັ້ນພົ້ນຈາກພຣົມຈັນຍ໌ນີ້ໄດ້ ຄວາມວ່າ ໃຫ້ພົ້ນຈາກຄວາມເປັນ ພິກສຸ ໃຫ້ ພົ້ນຈາກສມນະທັມ ໃຫ້ພົ້ນຈາກສີລຂັນທ໌ ໃຫ້ພົ້ນຈາກຄຸນຄືຕບະ
ຄໍາວ່າ ຄັນສມັຍຕໍ່ຈາກນັ້ນ ຄວາມວ່າ ລ່ວງຂນະ ລຍະ ຄູ່ທີ່ພິກສຸຖືກໃສ່ຄວາມໄປແລ້ວ
ຄໍາວ່າ ອັນຜູ້ໃດຜູ້ນຶ່ງໂຈທກໍຕາມ ຄື ຈະມີຜູ້ເຊື່ອຖືຕາມເຣື່ອງທີ່ເຮັດໃຫ້ພິກສຸນັ້ນຖືກໃສ່ຄວາມກໍ ຕາມ
ຄໍາວ່າ ບໍ່ໂຈທກໍຕາມ ຄື ບໍ່ມີໃຜໆ ກ່າວເຖິງພິກສຸນັ້ນ
ຊື່ວ່າ ອທິກຣນ໌(ບັນຫາຂອງສົງຂ໌) ໄດ້ແກ່ ອທິກຣນ໌(ບັນຫາຂອງສົງຂ໌) ໔ ຢ່າງ ຄື ວິວາທາທິ ກຣນ໌ ອນຸວາທາທິກຣນ໌ ອາປັຕຕາທິກຣນ໌ ແລະກິຈຈາທິກຣນ໌
ຄໍາວ່າ ແລະພິກສຸຍອມຮັບຜິດ ຄວາມວ່າ ພິກສຸນັ້ນຍອມຮັບວ່າ "ຂ້າພະເຈົ້າເວົ້າຄໍາໄຮ້ປໂຍດ ເວົ້າ

ເຫັຈ ເວົ້າບໍ່ແມ່ນແທ້ບໍ່ຮູ້ຈຶ່ງເວົ້າ"
ຄໍາວ່າ ເປັນສັງຊາທິເສສ ຄວາມວ່າ ສໍາລັບອາບັຕິນັ້ນ ສົງຊ໌ເທົ່ານັ້ນໃຫ້ປຣິວາສ ຯລຯ ເພາະເຫຕຸ
ນັ້ນ ພຣະຜູ້ມີພຣະພາຄຈຶ່ງຕຣັສຮຽກວ່າ "ເປັນສັງຊາທິເສສ"

## ບທພາຊນີຍ໌

## ບໍ່ເຫັນ ໂຈທວ່າໄດ້ເຫັນ

[໓໘໗] ພິກສຸຜູ້ໂຈທກ໌ບໍ່ໄດ້ເຫັນພິກສຸຕ້ອງອາບັຕິປາຣາຊິກ ຖ້າໂຈທພິກສຸນັ້ນວ່າ "ຂ້າພະເຈົ້າເຫັນທ່ານຕ້ອງອາບັຕິປາຣາຊິກແລ້ວ ທ່ານບໍ່ເປັນສມນະ ບໍ່ເປັນເຊື້ອສາຍສາກຍບຸຕຣ ທ່ານຮ່ວມອຸໂບສົຖ ປວາຣນາຫລືສັງຊກັມບໍ່ໄດ້" ຕ້ອງອາບັຕິສັງຊາທິເສສ ທຸກໆ ຄໍາເວົ້າ

## ບໍ່ໄດ້ຍິນ ໂຈທວ່າໄດ້ຍິນ

ພິກສຸຜູ້ໂຈທກ໌ບໍ່ໄດ້ຍິນວ່າ ພິກສຸຕ້ອງອາບັຕິປາຣາຊິກແລ້ວ ຖ້າໂຈທພິກສຸນັ້ນວ່າ "ຂ້າພະເຈົ້າໄດ້ຍິນວ່າທ່ານ

ຕ້ອງອາບັຕິປາຣາຊິກແລ້ວ ທ່ານບໍ່ເປັນສມນະ ບໍ່ເປັນເຊື້ອສາຍສາກຍບຸຕຣ ທ່ານຮ່ວມອຸໂບສົຖ ປວາຣນາ ຫລື ສັງຊກັມບໍ່ໄດ້" ຕ້ອງອາບັຕິສັງຊາທິເສສທຸກໆ ຄໍາເວົ້າ

## ບໍ່ນຶກສົງສັຍ ໂຈທວ່ານຶກສົງສັຍ

ພິກສຸຜູ້ໂຈທກ໌ບໍ່ໄດ້ນຶກສົງສັຍວ່າ ພິກສຸຕ້ອງອາບັຕິປາຣາຊິກແລ້ວ ຖ້າໂຈທພິກສຸນັ້ນວ່າ "ຂ້າພະເຈົ້ານຶກສົງສັຍວ່າທ່ານຕ້ອງອາບັຕິປາຣາຊິກແລ້ວ ທ່ານບໍ່ເປັນສມນະ ບໍ່ເປັນເຊື້ອສາຍສາກຍບຸຕຣ ທ່ານຮ່ວມອຸໂບສົຖ ປວາຣນາຫລືສັງຊກັມບໍ່ໄດ້" ຕ້ອງອາບັຕິສັງຊາທິເສສທຸກໆ ຄໍາເວົ້າ

## ບໍ່ເຫັນ ໂຈທວ່າໄດ້ເຫັນແລະໄດ້ຍິນ

ພິກສຸຜູ້ໂຈທກ໌ບໍ່ໄດ້ເຫັນພິກສຸຕ້ອງອາບັຕິປາຣາຊິກ ຖ້າໂຈທພິກສຸນັ້ນວ່າ "ຂ້າພະເຈົ້າເຫັນແລະໄດ້ຍິນວ່າທ່ານຕ້ອງອາບັຕິປາຣາຊິກແລ້ວ ທ່ານບໍ່ເປັນສມນະ ບໍ່ເປັນເຊື້ອສາຍສາກຍບຸຕຣ ທ່ານຮ່ວມອຸໂບສົຖ ປວາຣນາຫລືສັງຊກັມບໍ່ໄດ້" ຕ້ອງອາບັຕິສັງຊາທິເສສທຸກໆ ຄໍາເວົ້າ

ບໍ່ເຫັນ ໂຈທວ່າໄດ້ເຫັນແລະນຶກສົງສັຍ

ພິກສຸຜູ້ໂຈທກ໌ບໍ່ໄດ້ເຫັນພິກສຸຕ້ອງອາບັຕິປາຣາຊິກ ຖ້າໂຈທພິກສຸນັ້ນວ່າ “ຂ້າພະເຈົ້າໄດ້ເຫັນແລະນຶກສົງສັຍວ່າທ່ານຕ້ອງອາບັຕິປາຣາຊິກແລ້ວ ທ່ານບໍ່ເປັນສມນະ ຯລຯ” ຕ້ອງອາບັຕິສັງຂາທິເສສຫຸກໆ ຄໍາເວົ້າ

ບໍ່ເຫັນ ໂຈທວ່າໄດ້ເຫັນ ໄດ້ຍິນ ແລະນຶກສົງສັຍ

ພິກສຸຜູ້ໂຈທກ໌ບໍ່ໄດ້ເຫັນພິກສຸຕ້ອງອາບັຕິປາຣາຊິກ ຖ້າໂຈທພິກສຸນັ້ນວ່າ “ຂ້າພະເຈົ້າໄດ້ເຫັນ ໄດ້ຍິນແລະນຶກສົງສັຍວ່າທ່ານຕ້ອງອາບັຕິປາຣາຊິກແລ້ວ ທ່ານບໍ່ເປັນສມນະ ຯລຯ” ຕ້ອງອາບັຕິສັງຂາທິເສສຫຸກໆ ຄໍາເວົ້າ

ບໍ່ໄດ້ຍິນ ໂຈທວ່າໄດ້ຍິນແລະນຶກສົງສັຍ

ພິກສຸຜູ້ໂຈທກ໌ບໍ່ໄດ້ຍິນວ່າພິກສຸຕ້ອງອາບັຕິປາຣາຊິກແລ້ວ ຖ້າໂຈທພິກສຸນັ້ນວ່າ “ຂ້າພະເຈົ້າໄດ້ຍິນແລະນຶກ ສົງສັຍວ່າທ່ານຕ້ອງອາບັຕິປາຣາຊິກແລ້ວ ທ່ານບໍ່ເປັນສມນະ ຯລຯ” ຕ້ອງອາບັຕິສັງຂາທິເສສຫຸກໆ ຄໍາເວົ້າ

ບໍ່ໄດ້ຍິນ ໂຈທວ່າໄດ້ຍິນແລະໄດ້ເຫັນ

ພິກສຸຜູ້ໂຈທກ໌ບໍ່ໄດ້ຍິນວ່າພິກສຸຕ້ອງອາບັຕິປາຣາຊິກແລ້ວ ຖ້າໂຈທພິກສຸນັ້ນວ່າ “ຂ້າພະເຈົ້າໄດ້ຍິນແລະໄດ້ເຫັນ ທ່ານຕ້ອງອາບັຕິປາຣາຊິກແລ້ວ ທ່ານບໍ່ເປັນສມນະ ຯລຯ” ຕ້ອງອາບັຕິສັງຂາທິເສສຫຸກໆ ຄໍາເວົ້າ

ບໍ່ໄດ້ຍິນ ໂຈທວ່າໄດ້ຍິນ ນຶກສົງສັຍ ແລະໄດ້ເຫັນ

ພິກສຸຜູ້ໂຈທກ໌ບໍ່ໄດ້ຍິນວ່າພິກສຸຕ້ອງອາບັຕິປາຣາຊິກແລ້ວ ຖ້າໂຈທພິກສຸນັ້ນວ່າ“ຂ້າພະເຈົ້າໄດ້ຍິນນຶກສົງສັຍແລະໄດ້ເຫັນ ທ່ານຕ້ອງອາບັຕິປາຣາຊິກແລ້ວ ທ່ານບໍ່ເປັນສມນະ ຯລຯ” ຕ້ອງອາບັຕິສັງຂາທິເສສຫຸກໆຄໍາເວົ້າ

ບໍ່ນຶກສົງສັຍ ໂຈທວ່ານຶກສົງສັຍແລະໄດ້ເຫັນ

ພິກຂຸຜູ້ໂຈທກ໌ບໍ່ໄດ້ນຶກສົງສັຍວ່າ ພິກຂຸຕ້ອງອາບັຕິປາຣາຊິກແລ້ວ ຖ້າໂຈທພິກຂຸນັ້ນວ່າ "ຂ້າພະເຈົ້ານຶກສົງສັຍແລະໄດ້ເຫັນ ທ່ານຕ້ອງອາບັຕິປາຣາຊິກແລ້ວ ທ່ານບໍ່ເປັນສມນະ ຯລຯ" ຕ້ອງອາບັຕິສັງຂາທິເສສທຸກໆຄຳເວົ້າ

ບໍ່ນຶກສົງສັຍ ໂຈທວ່ານຶກສົງສັຍແລະໄດ້ຍິນ

ພິກຂຸຜູ້ໂຈທກ໌ບໍ່ໄດ້ນຶກສົງສັຍວ່າ ພິກຂຸຕ້ອງອາບັຕິປາຣາຊິກແລ້ວ ຖ້າໂຈທພິກຂຸນັ້ນວ່າ "ຂ້າພະເຈົ້ານຶກສົງສັຍແລະໄດ້ຍິນວ່າທ່ານຕ້ອງອາບັຕິປາຣາຊິກແລ້ວ ທ່ານບໍ່ເປັນສມນະ ຯລຯ" ຕ້ອງອາບັຕິສັງຂາທິເສສທຸກໆ ຄຳເວົ້າ

ບໍ່ນຶກສົງສັຍ ໂຈທວ່ານຶກສົງສັຍ ໄດ້ເຫັນແລະໄດ້ຍິນ

ພິກຂຸຜູ້ໂຈທກ໌ບໍ່ໄດ້ນຶກສົງສັຍວ່າ ພິກຂຸຕ້ອງອາບັຕິປາຣາຊິກແລ້ວ ຖ້າໂຈທພິກຂຸນັ້ນວ່າ "ຂ້າພະເຈົ້ານຶກສົງສັຍໄດ້ເຫັນແລະໄດ້ຍິນວ່າ ທ່ານຕ້ອງອາບັຕິປາຣາຊິກແລ້ວ ທ່ານບໍ່ເປັນສມນະ ຯລຯ" ຕ້ອງອາບັຕິສັງຂາທິເສສທຸກໆ ຄຳເວົ້າ

ໄດ້ເຫັນ ໂຈທວ່າໄດ້ຍິນ

ພິກຂຸຜູ້ໂຈທກ໌ໄດ້ເຫັນພິກຂຸຕ້ອງອາບັຕິປາຣາຊິກ ຖ້າໂຈທພິກຂຸນັ້ນວ່າ "ຂ້າພະເຈົ້າໄດ້ຍິນວ່າ ທ່ານຕ້ອງອາບັຕິປາຣາຊິກແລ້ວ ຯລຯ" ຕ້ອງອາບັຕິສັງຂາທິເສສ ທຸກໆ ຄຳເວົ້າ

ໄດ້ເຫັນ ໂຈທວ່ານຶກສົງສັຍ...ໄດ້ຍິນແລະນຶກສົງສັຍ

ພິກຂຸຜູ້ໂຈທກ໌ໄດ້ເຫັນພິກຂຸຕ້ອງອາບັຕິປາຣາຊິກ ຖ້າໂຈທພິກຂຸນັ້ນວ່າ "ຂ້າພະເຈົ້ານຶກສົງສັຍວ່າທ່ານຕ້ອງອາບັຕິປາຣາຊິກ ຯລຯ" ຖ້າໂຈທພິກຂຸນັ້ນວ່າ "ຂ້າພະເຈົ້າໄດ້ຍິນແລະນຶກສົງສັຍວ່າ ທ່ານຕ້ອງອາບັຕິປາຣາຊິກແລ້ວ ຯລຯ" ຕ້ອງອາບັຕິສັງຂາທິເສສ ທຸກໆ ຄຳເວົ້າ

ໄດ້ຍິນ ໂຈທວ່ານຶກສົງສັຍ...ໄດ້ເຫັນ...ນຶກສົງສັຍແລະໄດ້ເຫັນ

ພິກຂຸຜູ້ໂຈທກ໌ໄດ້ຍິນວ່າ ພິກຂຸຕ້ອງອາບັຕິປາຣາຊິກແລ້ວ ຖ້າໂຈທພິກຂຸນັ້ນວ່າ "ຂ້າພະເຈົ້ານຶກສົງສັຍວ່າ ທ່ານຕ້ອງອາບັຕິປາຣາຊິກແລ້ວ ຯລຯ" ຖ້າໂຈທພິກຂຸນັ້ນວ່າ "ຂ້າພະເຈົ້າໄດ້ເຫັນ

ທ່ານຕ້ອງອາບັຕິປາຣາຊິກແລ້ວ ຯລຯ” ຖ້າໂຈທພິກຂຸນັ້ນວ່າ “ຂ້າພະເຈົ້ານຶກສົງສັຍແລະໄດ້ເຫັນ ທ່ານຕ້ອງອາບັຕິປາຣາຊິກແລ້ວ ຯລຯ” ຕ້ອງອາບັຕິສັງຂາທິເສສ ທຸກໆ ຄຳເວົ້າ

ນຶກສົງສັຍ ໂຈທວ່າໄດ້ເຫັນ...ໄດ້ຍິນ...ໄດ້ເຫັນແລະໄດ້ຍິນ

ພິກຂຸຜູ້ໂຈທກ໌ນຶກສົງສັຍວ່າ ພິກຂຸຕ້ອງອາບັຕິປາຣາຊິກແລ້ວ ຖ້າໂຈທພິກຂຸນັ້ນວ່າ “ຂ້າພະເຈົ້າໄດ້ເຫັນທ່ານຕ້ອງອາບັຕິປາຣາຊິກແລ້ວ ຯລຯ” ຖ້າໂຈທພິກຂຸນັ້ນວ່າ “ຂ້າພະເຈົ້າໄດ້ຍິນວ່າທ່ານຕ້ອງອາບັຕິປາຣາຊິກແລ້ວ ຯລຯ” ຖ້າໂຈທພິກຂຸນັ້ນວ່າ “ຂ້າພະເຈົ້າໄດ້ເຫັນແລະໄດ້ຍິນວ່າທ່ານຕ້ອງອາບັຕິປາຣາຊິກແລ້ວ ທ່ານບໍ່ເປັນສມນະ ບໍ່ເປັນເຊື້ອສາຍສາກຍບຸຕຣ ທ່ານຮ່ວມອຸໂບສົຖ ປວາຣນາຫລືສັງຂກັມບໍ່ໄດ້” ຕ້ອງອາບັຕິສັງຂາທິ ເສສ ທຸກໆ ຄຳເວົ້າ

ໄດ້ເຫັນ ບໍ່ແນໃຈ

ພິກຂຸຜູ້ໂຈທກ໌ໄດ້ເຫັນພິກຂຸຕ້ອງອາບັຕິປາຣາຊິກ ບໍ່ແນ່ໃຈໃນເຣື່ອງທີ່ໄດ້ເຫັນ ຄືກຳຫນົດສິ່ງທີ່ໄດ້ເຫັນບໍ່ໄດ້ ຈຳສິ່ງທີ່ໄດ້ເຫັນບໍ່ໄດ້ ລືມສິ່ງທີ່ໄດ້ເຫັນ ຖ້າໂຈທພິກຂຸນັ້ນວ່າ“ຂ້າພະເຈົ້າໄດ້ເຫັນແລະໄດ້ຍິນ ຯລຯ ຂ້າພະເຈົ້າໄດ້ເຫັນແລະນຶກສົງສັຍ ຯລຯ ຂ້າພະເຈົ້າໄດ້ເຫັນໄດ້ຍິນແລະນຶກສົງສັຍວ່າ ທ່ານຕ້ອງອາບັຕິປາຣາຊິກ ຯລຯ”

ໄດ້ຍິນ ບໍ່ແນ່ໃຈ

ພິກຂຸຜູ້ໂຈທກ໌ໄດ້ຍິນວ່າ ພິກຂຸຕ້ອງອາບັຕິປາຣາຊິກແລ້ວ ບໍ່ແນ່ໃຈໃນເຣື່ອງທີ່ໄດ້ຍິນ ຄື ກຳຫນົດເຣື່ອງທີ່ໄດ້ຍິນບໍ່ໄດ້ ຈຳເຣື່ອງທີ່ໄດ້ຍິນບໍ່ໄດ້ ລືມເຣື່ອງທີ່ໄດ້ຍິນ ຖ້າໂຈທພິກຂຸນັ້ນວ່າ “ຂ້າພະເຈົ້າໄດ້ຍິນແລະນຶກສົງສັຍ ຯລຯ ຂ້າພະເຈົ້າໄດ້ຍິນແລະໄດ້ເຫັນ ຯລຯ ຂ້າພະເຈົ້າໄດ້ຍິນ ນຶກສົງສັຍແລະໄດ້ເຫັນ ທ່ານຕ້ອງອາບັຕິປາຣາຊິກແລ້ວ ຯລຯ”

ນຶກສົງສັຍ ບໍ່ແນ່ໃຈ

ພິກຂຸຜູ້ໂຈທກ໌ນຶກສົງສັຍວ່າ ພິກຂຸຕ້ອງອາບັຕິປາຣາຊິກແລ້ວ ບໍ່ແນ່ໃຈໃນເຣື່ອງທີ່ນຶກສົງສັຍ ຄືກຳຫນົດເຣື່ອງທີ່ນຶກສົງສັຍບໍ່ໄດ້ ຈຳເຣື່ອງທີ່ນຶກສົງສັຍບໍ່ໄດ້ ລືມເຣື່ອງທີ່ນຶກສົງສັຍ ຖ້າໂຈທພິກຂຸນັ້ນວ່າ “ຂ້າພະເຈົ້າ ນຶກ ສົງສັຍແລະເຫັນ ຯລຯ ຂ້າພະເຈົ້ານຶກສົງສັຍແລະໄດ້ຍິນ ຯລຯ ຂ້າພະເຈົ້າ

ນຶກສົງສັຍ ໄດ້ເຫັນແລະໄດ້ຍິນວ່າ ທ່ານຕ້ອງອາບັຕິປາຣາຊິກແລ້ວ ທ່ານບໍ່ເປັນສມນະ ບໍ່ເປັນເຊື້ອສາຍສກຸຍບຸຕຣ ທ່ານຮ່ວມອຸໂບສົຖ ປວາຣນາຫລືສັງຂກັມບໍ່ໄດ້" ຕ້ອງອາບັຕິສັງຂາທິເສສ ທຸກໆ ຄຳເວົ້າ

ບໍ່ເຫັນ ສັ່ງໃຫ້ໂຈທວ່າເຫັນ

[໓໗໗] ພິກສຸຜູ້ໂຈທກ໌ບໍ່ໄດ້ເຫັນພິກສຸຕ້ອງອາບັຕິປາຣາຊິກ ຖ້າສັ່ງໃຫ້ໂຈທພິກສຸນັ້ນວ່າ "ຂ້າພະເຈົ້າໄດ້ເຫັນທ່ານຕ້ອງອາບັຕິປາຣາຊິກແລ້ວ ທ່ານບໍ່ເປັນສມນະ ບໍ່ເປັນເຊື້ອສາຍສກຸຍບຸຕຣ ທ່ານຮ່ວມອຸໂບສົຖ ປວາຣນາຫລືສັງຂກັມບໍ່ໄດ້" ຕ້ອງອາບັຕິສັງຂາທິເສສ ທຸກໆ ຄຳເວົ້າ

ບໍ່ໄດ້ຍິນ ສັ່ງໃຫ້ໂຈທວ່າໄດ້ຍິນ

ພິກສຸຜູ້ໂຈທກ໌ບໍ່ໄດ້ຍິນວ່າ ພິກສຸຕ້ອງອາບັຕິປາຣາຊິກແລ້ວ ຖ້າສັ່ງໃຫ້ໂຈທພິກສຸນັ້ນວ່າ "ຂ້າພະເຈົ້າໄດ້ຍິນວ່າ ທ່ານຕ້ອງອາບັຕິປາຣາຊິກແລ້ວ ຯລຯ" ຕ້ອງອາບັຕິສັງຂາທິເສສ ທຸກໆ ຄຳເວົ້າ

ບໍ່ໄດ້ນຶກສົງສັຍ ສັ່ງໃຫ້ໂຈທວ່າໄດ້ສົງສັຍ

ພິກສຸຜູ້ໂຈທກ໌ບໍ່ໄດ້ນຶກສົງສັຍວ່າ ພິກສຸຕ້ອງອາບັຕິປາຣາຊິກແລ້ວ ຖ້າສັ່ງໃຫ້ໂຈທພິກສຸນັ້ນວ່າ "ຂ້າພະເຈົ້ານຶກສົງສັຍວ່າ ທ່ານຕ້ອງອາບັຕິປາຣາຊິກແລ້ວ ຯລຯ" ຕ້ອງອາບັຕິສັງຂາທິເສສທຸກໆ ຄຳເວົ້າ

ບໍ່ໄດ້ເຫັນ ສັ່ງໃຫ້ໂຈທວ່າໄດ້ເຫັນ...

ພິກສຸຜູ້ໂຈທກ໌ບໍ່ໄດ້ເຫັນພິກສຸຕ້ອງອາບັຕິປາຣາຊິກ ຖ້າສັ່ງໃຫ້ໂຈທພິກສຸນັ້ນວ່າ "ຂ້າພະເຈົ້າ ໄດ້ເຫັນ ໄດ້ຍິນ ຯລຯ ຂ້າພະເຈົ້າໄດ້ເຫັນ ໄດ້ນຶກສົງສັຍ ຯລຯ ຂ້າພະເຈົ້າໄດ້ເຫັນໄດ້ຍິນ ໄດ້ນຶກສົງສັຍວ່າ ທ່ານຕ້ອງອາບັຕິປາຣາຊິກແລ້ວ ຯລຯ" ຕ້ອງອາບັຕິສັງຂາທິເສສ ທຸກໆ ຄຳເວົ້າ

ບໍ່ໄດ້ຍິນ ສັ່ງໃຫ້ໂຈທວ່າໄດ້ຍິນ...

ພິກສຸຜູ້ໂຈທກ໌ບໍ່ໄດ້ຍິນວ່າ ພິກສຸຕ້ອງອາບັຕິປາຣາຊິກແລ້ວ ຖ້າສັ່ງໃຫ້ໂຈທພິກສຸນັ້ນວ່າ "ຂ້າພະເຈົ້າໄດ້ຍິນ ໄດ້ນຶກສົງສັຍ ຯລຯ ຂ້າພະເຈົ້າໄດ້ຍິນ ໄດ້ເຫັນ ຯລຯ ຂ້າພະເຈົ້າໄດ້ຍິນ ໄດ້ນຶກສົງສັຍໄດ້ເຫັນວ່າ ທ່ານຕ້ອງອາບັຕິປາຣາຊິກແລ້ວ ຯລຯ" ຕ້ອງອາບັຕິສັງຂາທິເສສ ທຸກໆ ຄຳເວົ້າ

ບໍ່ນຶກສົງສັຍ ສັ່ງໃຫ້ໂຈທວ່າໄດ້ນຶກສົງສັຍ...

ພິກສຸຜູ້ໂຈທກ໌ບໍ່ໄດ້ນຶກສົງສັຍວ່າ ພິກສຸຕ້ອງອາບັຕິປາຣາຊິກແລ້ວ ຖ້າສັ່ງໃຫ້ໂຈທພິກສຸນັ້ນວ່າ "ຂ້າພະເຈົ້າໄດ້ນຶກສົງສັຍ ໄດ້ເຫັນ ຯລຯ ຂ້າພະເຈົ້າໄດ້ນຶກສົງສັຍ ໄດ້ຍິນ ຯລຯ ຂ້າພະເຈົ້າໄດ້ນຶກສົງສັຍ ໄດ້ເຫັນໄດ້ຍິນວ່າ ທ່ານຕ້ອງອາບັຕິປາຣາຊິກແລ້ວ ຯລຯ" ຕ້ອງອາບັຕິສັງຂາທິເສສ ທຸກໆ ຄຳເວົ້າ

ໄດ້ເຫັນ ສັ່ງໃຫ້ໂຈທວ່າໄດ້ຍິນ...

ພິກສຸຜູ້ໂຈທກ໌ໄດ້ເຫັນພິກສຸຕ້ອງອາບັຕິປາຣາຊິກ ຖ້າສັ່ງໃຫ້ໂຈທພິກສຸນັ້ນວ່າ "ຂ້າພະເຈົ້າໄດ້ຍິນວ່າ ທ່ານຕ້ອງອາບັຕິປາຣາຊິກແລ້ວ ຯລຯ ຂ້າພະເຈົ້າໄດ້ນຶກສົງສັຍວ່າ ທ່ານຕ້ອງອາບັຕິປາຣາຊິກແລ້ວ ຯລຯ ຂ້າພະເຈົ້າໄດ້ຍິນ ໄດ້ນຶກສົງສັຍວ່າ ທ່ານຕ້ອງອາບັຕິປາຣາຊິກແລ້ວ ຯລຯ" ຕ້ອງອາບັຕິສັງຂາທິເສສ ທຸກ ໆ ຄຳເວົ້າ

ໄດ້ຍິນ ສັ່ງໃຫ້ໂຈທວ່ານຶກສົງສັຍ...

ພິກສຸຜູ້ໂຈທກ໌ໄດ້ຍິນວ່າ ພິກສຸຕ້ອງອາບັຕິປາຣາຊິກແລ້ວ ຖ້າສັ່ງໃຫ້ໂຈທພິກສຸນັ້ນວ່າ "ຂ້າພະເຈົ້າໄດ້ນຶກສົງສັຍ ຯລຯ" ຖ້າສັ່ງໃຫ້ໂຈທວ່າ "ຂ້າພະເຈົ້າໄດ້ເຫັນ ຯລຯ" ຖ້າສັ່ງໃຫ້ໂຈທວ່າ "ຂ້າພະເຈົ້າໄດ້ນຶກສົງສັຍ ໄດ້ເຫັນ ທ່ານຕ້ອງອາບັຕິປາຣາຊິກແລ້ວ ຯລຯ" ຕ້ອງອາບັຕິສັງຂາທິເສສ ທຸກໆ ຄຳເວົ້າ

ນຶກສົງສັຍ ສັ່ງໃຫ້ໂຈທວ່າໄດ້ເຫັນ...

ພິກສຸຜູ້ໂຈທກ໌ນຶກສົງສັຍວ່າ ພິກສຸຕ້ອງອາບັຕິປາຣາຊິກແລ້ວ ຖ້າສັ່ງໃຫ້ໂຈທພິກສຸນັ້ນວ່າ "ຂ້າພະເຈົ້າໄດ້ເຫັນ ທ່ານຕ້ອງອາບັຕິປາຣາຊິກແລ້ວ ຯລຯ" ຖ້າສັ່ງໃຫ້ໂຈທພິກສຸນັ້ນວ່າ "ຂ້າພະເຈົ້າໄດ້ຍິນ ຯລຯ" ຖ້າສັ່ງໃຫ້ໂຈທພິກສຸນັ້ນວ່າ "ຂ້າພະເຈົ້າໄດ້ເຫັນ ໄດ້ຍິນວ່າ ທ່ານຕ້ອງອາບັຕິປາຣາຊິກແລ້ວ ຯລຯ" ຕ້ອງອາບັຕິສັງຂາທິເສສ ທຸກໆ ຄຳເວົ້າ

ໄດ້ເຫັນ ບໍ່ແນ່ໃຈ ສັ່ງໃຫ້ໂຈທ

ພິກສຸຜູ້ໂຈທກ໌ໄດ້ເຫັນພິກສຸຕ້ອງອາບັຕິປາຣາຊິກ ບໍ່ແນ່ໃຈໃນເຣື້ອງທີ່ໄດ້ເຫັນ ຄື ກໍາຫນົດສິ່ງທີ່ໄດ້ເຫັນບໍ່ໄດ້ ຈໍາສິ່ງທີ່ໄດ້ເຫັນບໍ່ໄດ້ ລືມສິ່ງທີ່ໄດ້ເຫັນ ຯລຯ ໄດ້ຍິນ ບໍ່ແນ່ໃຈ ສັ່ງໃຫ້ໂຈທ ພິກສຸຜູ້ໂຈທກ໌ບໍ່ແນ່ໃຈໃນເຣື້ອງທີ່ໄດ້ຍິນ ຄື ກໍາຫນົດເຣື້ອງທີ່ໄດ້ຍິນບໍ່ໄດ້ ຈໍາເຣື້ອງທີ່ໄດ້ຍິນບໍ່ໄດ້ ລືມເຣື້ອງທີ່ໄດ້ຍິນ ຯລຯ

## ບໍ່ແນ່ໃຈ ນຶກສົງສັຍ ສັ່ງໃຫ້ໂຈທ

ພິກສຸຜູ້ໂຈທກ໌ບໍ່ແນ່ໃຈໃນເຣື້ອງທີ່ນຶກສົງສັຍ ຄື ກໍາຫນົດເຣື້ອງທີ່ນຶກສົງສັຍບໍ່ໄດ້ ຈໍາເຣື້ອງທີ່ນຶກສົງສັຍບໍ່ໄດ້ ລືມເຣື້ອງທີ່ນຶກສົງສັຍ ຖ້າສັ່ງໃຫ້ໂຈທພິກສຸນັ້ນວ່າ "ຂ້າພະເຈົ້າໄດ້ນຶກສົງສັຍ ໄດ້ເຫັນ ຯລຯ" ລືມເຣື້ອງທີ່ນຶກສົງສັຍ ຖ້າສັ່ງໃຫ້ໂຈທພິກສຸນັ້ນວ່າ "ຂ້າພະເຈົ້າໄດ້ນຶກສົງສັຍ ໄດ້ຍິນ ຯລຯ" ລືມເຣື້ອງທີ່ນຶກສົງສັຍ ຖ້າສັ່ງໃຫ້ໂຈທພິກສຸນັ້ນວ່າ "ຂ້າພະເຈົ້າໄດ້ນຶກສົງສັຍ ໄດ້ເຫັນ ໄດ້ຍິນວ່າທ່ານຕ້ອງອາບັຕິປາຣາຊິກແລ້ວ ທ່ານບໍ່ເປັນສມນະ ບໍ່ເປັນເຊື້ອສາຍສາກຍບຸຕຣ ທ່ານຮ່ວມອຸໂບສົຖ ປວາຣນາຫລືສັງຄກັມບໍ່ໄດ້" ຕ້ອງອາບັຕິສັງຄາ ທິເສສ ທຸກໆ ຄໍາເວົ້າ

## ຄວາມເຫັນ ໔ ຢ່າງ

[ມົກຸລ] ຈໍາເລີຍບໍ່ບໍຣິສຸດທ໌ ໂຈທກ໌ມີຄວາມເຫັນວ່າເປັນຜູ້ບໍຣິສຸດທ໌ ໑ ຈໍາເລີຍບໍຣິສຸດທ໌ ໂຈທກ໌ມີຄວາມເຫັນວ່າເປັນຜູ້ບໍ່ບໍຣິສຸດທ໌ ໑ ຈໍາເລີຍບໍ່ບໍຣິສຸດທ໌ ໂຈທກ໌ມີຄວາມເຫັນວ່າເປັນຜູ້ບໍ່ບໍຣິສຸດທ໌ ໑ ຈໍາເລີຍບໍຣິສຸດທ໌ ໂຈທກ໌ມີຄວາມເຫັນວ່າເປັນຜູ້ບໍຣິສຸດທ໌ ໑ ພິກສຸຕ້ອງອາບັຕິປາຣາຊິກຂໍ້ໃດຂໍ້ນຶ່ງແລ້ວ ຍ່ອມເປັນຜູ້ບໍ່ບໍຣິສຸດທ໌ ຖ້າພິກສຸຜູ້ໂຈທກ໌ມີຄວາມເຫັນວ່າເປັນຜູ້ບໍຣິສຸດທ໌ ບໍ່ຂໍໂອກາສກ່ອນ ມີຄວາມປະສົງຄ໌ຈະໃຫ້ພົ້ນຈາກພຣົມຈັນຍ໌ ຈຶ່ງໂຈທພິກສຸນັ້ນ ຕ້ອງອາບັຕິທຸກກຕກັບອາບັຕິສັງຄາທິເສສ

ພິກສຸຕ້ອງອາບັຕິປາຣາຊິກຂໍ້ໃດຂໍ້ນຶ່ງແລ້ວ ຍ່ອມເປັນຜູ້ບໍ່ບໍຣິສຸດທ໌ ຖ້າພິກສຸຜູ້ໂຈທກ໌ມີຄວາມເຫັນວ່າເປັນຜູ້ບໍຣິສຸດທ໌ ຂໍໂອກາສກ່ອນ ມີຄວາມປະສົງຄ໌ຈະໃຫ້ພົ້ນຈາກພຣົມຈັນຍ໌ຈຶ່ງໂຈທພິກສຸນັ້ນ ຕ້ອງອາບັຕິສັງຄາທິເສສ
ພິກສຸຕ້ອງອາບັຕິປາຣາຊິກຂໍ້ໃດຂໍ້ນຶ່ງແລ້ວ ຍ່ອມເປັນຜູ້ບໍ່ບໍຣິສຸດທ໌ ຖ້າພິກສຸຜູ້ໂຈທກ໌ມີຄວາມເຫັນວ່າເປັນຜູ້ບໍຣິສຸດທ໌ ບໍ່ຂໍໂອກາສກ່ອນ ມີຄວາມປະສົງຄ໌ຈະດ່າຈຶ່ງໂຈທພິກສຸນັ້ນ ຕ້ອງອາບັຕິທຸກກຕກັບອາບັຕິປາຈິຕຕີຍ໌ ເພາະກ່າວສຽດສີ

ພິກສຸຕ້ອງອາບັຕິປາຣາຊິກຂໍ້ໃດຂໍ້ນຶ່ງແລ້ວ ຍ່ອມເປັນຜູ້ບໍ່ບໍຣິສຸດທິ໌ ຖ້າພິກສຸຜູ້ໂຈທກ໌ມີຄວາມເຫັນ ວ່າເປັນຜູ້ບໍຣິສຸດທິ໌ ຂໍໂອກາສກ່ອນ ມີຄວາມປະສົງຄ໌ຈະດ່າຈຶ່ງໂຈທພິກສຸນັ້ນ ຕ້ອງອາບັຕິປາຈິຕຕີຍ໌ ເພາະກ່າວສຽດສີ

ພິກສຸບໍ່ຕ້ອງອາບັຕິປາຣາຊິກຂໍ້ໃດຂໍ້ນຶ່ງ ຍ່ອມເປັນຜູ້ບໍຣິສຸດທິ໌ ຖ້າພິກສຸຜູ້ໂຈທກ໌ມີຄວາມເຫັນວ່າ ເປັນຜູ້ບໍ່ບໍຣິສຸດທິ໌ ບໍ່ຂໍໂອກາສກ່ອນ ມີຄວາມປະສົງຄ໌ຈະໃຫ້ພົ້ນຈາກພຣົມຈຣຣຍ໌ຈຶ່ງໂຈທພິກສຸນັ້ນ ຕ້ອງອາບັຕິທຸກກຕ

ພິກສຸບໍ່ຕ້ອງອາບັຕິປາຣາຊິກຂໍ້ໃດຂໍ້ນຶ່ງ ຍ່ອມເປັນຜູ້ບໍຣິສຸດທິ໌ ຖ້າພິກສຸຜູ້ໂຈທກ໌ມີຄວາມເຫັນວ່າ ເປັນຜູ້ບໍ່ບໍຣິສຸດທິ໌ ຂໍໂອກາສກ່ອນ ມີຄວາມປະສົງຄ໌ຈະໃຫ້ພົ້ນຈາກພຣົມຈຣຣຍ໌ຈຶ່ງໂຈທພິກສຸນັ້ນ ບໍ່ຕ້ອງອາບັຕິ

ພິກສຸບໍ່ຕ້ອງອາບັຕິປາຣາຊິກຂໍ້ໃດຂໍ້ນຶ່ງ ຍ່ອມເປັນຜູ້ບໍຣິສຸດທິ໌ ຖ້າພິກສຸຜູ້ໂຈທກ໌ມີຄວາມເຫັນວ່າ ເປັນຜູ້ບໍ່ບໍຣິສຸດທິ໌ ບໍ່ຂໍໂອກາສກ່ອນ ມີຄວາມປະສົງຄ໌ຈະດ່າຈຶ່ງໂຈທພິກສຸນັ້ນ ຕ້ອງອາບັຕິທຸກກຕ ກັບອາບັຕິປາຈິຕຕີຍ໌ ເພາະກ່າວສຽດສີ

ພິກສຸບໍ່ຕ້ອງອາບັຕິປາຣາຊິກຂໍ້ໃດຂໍ້ນຶ່ງ ຍ່ອມເປັນຜູ້ບໍຣິສຸດທິ໌ ຖ້າພິກສຸຜູ້ໂຈທກ໌ມີຄວາມເຫັນວ່າ ເປັນຜູ້ບໍ່ບໍຣິສຸດທິ໌ ຂໍໂອກາສກ່ອນ ມີຄວາມປະສົງຄ໌ຈະດ່າຈຶ່ງໂຈທພິກສຸນັ້ນ ຕ້ອງອາບັຕິປາຈິຕຕີຍ໌ ເພາະກ່າວສຽດສີ

ພິກສຸຕ້ອງອາບັຕິປາຣາຊິກຂໍ້ໃດຂໍ້ນຶ່ງແລ້ວ ຍ່ອມເປັນຜູ້ບໍ່ບໍຣິສຸດທິ໌ ຖ້າພິກສຸຜູ້ໂຈທກ໌ມີຄວາມເຫັນ ວ່າເປັນຜູ້ບໍ່ບໍຣິສຸດທິ໌ ບໍ່ຂໍໂອກາສກ່ອນ ມີຄວາມປະສົງຄ໌ຈະໃຫ້ພົ້ນຈາກພຣົມຈັນຍ໌ຈຶ່ງໂຈທພິກສຸນັ້ນ ຕ້ອງອາບັຕິທຸກກຕ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ສັງຂາທິເສສກັນທ໌] ໗. ປຖມທຸດຖໂທສສິກຂາບົທ ອນາປັຕຕິ ວາຣ

ພິກສຸຕ້ອງອາບັຕິປາຣາຊິກຂໍ້ໃດຂໍ້ນຶ່ງແລ້ວ ຍ່ອມເປັນຜູ້ບໍ່ບໍຣິສຸດທ໌ ຖ້າພິກສຸຜູ້ໂຈທກ໌ມີຄວາມເຫັນວ່າເປັນຜູ້ບໍ່ບໍຣິສຸດທ໌ ຂໍໂອກາສກ່ອນ ມີຄວາມປະສົງຄ໌ຈະໃຫ້ພົ້ນຈາກພຣົມຈັນຍ໌ຈຶ່ງໂຈທພິກສຸນັ້ນ ບໍ່ຕ້ອງອາບັຕິ

ພິກສຸຕ້ອງອາບັຕິປາຣາຊິກຂໍ້ໃດຂໍ້ນຶ່ງແລ້ວ ຍ່ອມເປັນຜູ້ບໍ່ບໍຣິສຸດທ໌ ຖ້າພິກສຸຜູ້ໂຈທກ໌ມີຄວາມເຫັນວ່າເປັນຜູ້ບໍ່ບໍຣິສຸດທ໌ ບໍ່ຂໍໂອກາສກ່ອນ ມີຄວາມປະສົງຄ໌ຈະດ່າຈຶ່ງໂຈທພິກສຸນັ້ນ ຕ້ອງອາບັຕິທຸກກຕກັບອາບັຕິປາຈິຕຕິຍ໌ ເພາະກ່າວສຽດສີ

ພິກສຸຕ້ອງອາບັຕິປາຣາຊິກຂໍ້ໃດຂໍ້ນຶ່ງແລ້ວ ຍ່ອມເປັນຜູ້ບໍ່ບໍຣິສຸດທ໌ ຖ້າພິກສຸຜູ້ໂຈທກ໌ມີຄວາມເຫັນວ່າເປັນຜູ້ບໍ່ບໍຣິສຸດທ໌ ຂໍໂອກາສກ່ອນ ມີຄວາມປະສົງຄ໌ຈະດ່າຈຶ່ງໂຈທພິກສຸນັ້ນ ຕ້ອງອາບັຕິປາຈິຕຕິຍ໌ ເພາະກ່າວສຽດສີ

ກສຸບໍ່ຕ້ອງອາບັຕິປາຣາຊິກຂໍ້ໃດຂໍ້ນຶ່ງ ຍ່ອມເປັນຜູ້ບໍຣິສຸດທ໌ ຖ້າພິກສຸຜູ້ໂຈທກ໌ມີຄວາມເຫັນວ່າເປັນຜູ້ບໍຣິສຸດທ໌ ບໍ່ຂໍໂອກາສກ່ອນ ມີຄວາມປະສົງຄ໌ຈະໃຫ້ພົ້ນຈາກພຣົມຈຣຣຍ໌ຈຶ່ງໂຈທພິກສຸນັ້ນ ຕ້ອງອາບັຕິທຸກກຕກັບອາບັຕິສັງຂາທິເສສ

ພິກສຸບໍ່ຕ້ອງອາບັຕິປາຣາຊິກຂໍ້ໃດຂໍ້ນຶ່ງ ຍ່ອມເປັນຜູ້ບໍຣິສຸດທ໌ ຖ້າພິກສຸຜູ້ໂຈທກ໌ມີຄວາມເຫັນວ່າເປັນຜູ້ບໍຣິສຸດທ໌ ຂໍໂອກາສກ່ອນ ມີຄວາມປະສົງຄ໌ຈະໃຫ້ພົ້ນຈາກພຣົມຈຣຣຍ໌ຈຶ່ງໂຈທພິກສຸນັ້ນ ຕ້ອງອາບັຕິສັງຂາທິເສສ

ພິກສຸບໍ່ຕ້ອງອາບັຕິປາຣາຊິກຂໍ້ໃດຂໍ້ນຶ່ງ ຍ່ອມເປັນຜູ້ບໍຣິສຸດທ໌ ຖ້າພິກສຸຜູ້ໂຈທກ໌ມີຄວາມເຫັນວ່າເປັນຜູ້ບໍຣິສຸດທ໌ ບໍ່ຂໍໂອກາສກ່ອນ ມີຄວາມປະສົງຄ໌ຈະດ່າຈຶ່ງໂຈທພິກສຸນັ້ນ ຕ້ອງອາບັຕິທຸກກຕກັບອາບັຕິປາຈິຕຕິຍ໌ ເພາະກ່າວ ສຽດສີ

ພິກສຸບໍ່ຕ້ອງອາບັຕິປາຣາຊິກຂໍ້ໃດຂໍ້ນຶ່ງ ຍ່ອມເປັນຜູ້ບໍຣິສຸດທ໌ ຖ້າພິກສຸຜູ້ໂຈທກ໌ມີຄວາມເຫັນວ່າເປັນຜູ້ບໍຣິສຸດທ໌ ຂໍໂອກາສກ່ອນ ມີຄວາມປະສົງຄ໌ຈະດ່າຈຶ່ງໂຈທພິກສຸນັ້ນ ຕ້ອງອາບັຕິປາຈິຕຕິຍ໌ ເພາະກ່າວສຽດສີ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໓໕໐] ໑. ພິກສຸຈໍາເລີຍເປັນຜູ້ບໍລິສຸດທິ໌ ພິກສຸຜູ້ໂຈທກ໌ມີຄວາມເຫັນວ່າເປັນຜູ້ບໍ່ບໍລິສຸດທິ໌

໒. ພິກສຸຈໍາເລີຍເປັນຜູ້ບໍ່ບໍລິສຸດທິ໌ ພິກສຸຜູ້ໂຈທກ໌ມີຄວາມເຫັນວ່າເປັນຜູ້ບໍ່ບໍລິສຸດທິ໌

໓. ພິກສຸວິກິລຈິຕ

໔. ພິກສຸຕົ້ນບັນຍັດ

ປຖມທຸຕຖໂທສສິກຂາບົທທີ ໆ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ສັງຂາທິເສສກັນທ໌] ໙. ທຸຕິຍທຸດຖໂທສສິກຂາບົທ ນິທານ ວັຕຖຸ

໙. ທຸຕິຍທຸຕຖໂທສສິກຂາບົທ

ວ່າດ້ວຍພິກສຸຂັດເຄືອງມີໂທສະ ສິກຂາບົທທີ ໔

ເຣື້ອງພຣະເມຕຕິຍະແລະພຣະພຸມມຊກະ

[໓໕໑] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເວລຸວັນ ສຖານທີ່ໃຫ້ເຫຍື່ອກະແຕ ເຂຕກຸງຣາຊຄືທ໌ ຄັ້ງນັ້ນ ພຣະເມຕຕິຍະແລະພຣະພຸມມຊກະ ກໍາລັງລົງຈາກພູເຂົາຄິຊຢກູຕ ເບິ່ງເຫັນແພະຕົວຜູ້ກັບໂຕແມ່ກໍາລັງສືບພັນທຸ໌ກັນ ຈຶ່ງກ່າວວ່າ "ເອົາເຖີດພວກເຮົາຈະສົມມຸດແພະຕົວຜູ້ເປັນພຣະທັພພມັລລບຸຕຣ ສົມມຸດແພະໂຕແມ່ເປັນພິກສຸນີເມຕຕິຍາ ຈັກກ່າວວ່າ "ຄັ້ງກ່ອນພວກເຮົາກ່າວຫາພຣະທັພພມັລລບຸຕຣ ດ້ວຍໄດ້ຍິນມາ ແຕ່ບັດນີ້ພວກເຮົາໄດ້ເຫັນພຣະທັພພມຸລລບຸຕຣເສພເມຖຸນກັບພິກສຸນີເມຕຕິຍາ ດ້ວຍຕົນເອງ" ທ່ານທັງສອງໄດ້ສົມມຸດພຣະທັພພມັລລບຸຕຣເປັນແພະຕົວຜູ້ ສົມມຸດພິກສຸນີເມຕຕິຍາເປັນແພະຕົວແມ່ ແລ້ວແຈ້ງໃຫ້ພິກສຸທັງຫລາຍຊາບວ່າ "ຄັ້ງກ່ອນ ຯລຯ ແຕ່ບັດນີ້ ພວກເຮົາໄດ້ເຫັນພຣະທັພພມັລລບຸຕຣເສພເມຖຸນກັບພິກສຸນີເມຕຕິຍາ ດ້ວຍຕົນເອງ" ພິກສຸທັງຫລາຍກ່າວຢ່າງນີ້ວ່າ "ທ່ານທັງຫລາຍ ພວກທ່ານຢ່າກ່າວຢ່າງນີ້ ທ່ານພຣະທັພພມັລລບຸຕຣຈະບໍ່ທໍາກັມເຊັ່ນນັ້ນ" ແລ້ວນໍາເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ສອບຖາມ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະທັພພມັລລບຸຕຣວ່າ "ທັພພະ ທ່ານຈຳໄດ້ບໍ່ວ່າເຄີຍທຳຕາມທີ່ພິກສຸເຫລົ່ານີ້ກ່າວຫາ" ທ່ານພຣະທັພພມັລລບຸຕຣຂາບທູລວ່າ "ພຣະພຸທທເຈົ້າຂ້າ ພຣະຜູ້ມີພຣະພາຄຍ່ອມຊົງຊາບວ່າ ຂ້າພຣະພຸທທເຈົ້າເປັນຢ່າງໃດ" ແມ່ນຄັ້ງທີ ໔ ພຣະຜູ້ມີພຣະພາຄຕຣັສຖາມທ່ານພຣະທັພພມັລລບຸຕຣ ຯລຯ ແມ່ນຄັ້ງທີ ໓ ຕຣັສຖາມທ່ານພຣະທັພພມັລລບຸຕຣວ່າ "ທັພພະ ທ່ານຈຳໄດ້ບໍ່ວ່າໄດ້ທຳຕາມທີ່ພິກສຸເຫລົ່ານີ້ກ່າວຫາ" ພຣະທັພພມັລລບຸຕຣຂາບທູລວ່າ "ພຣະພຸທທເຈົ້າຂ້າ ພຣະຜູ້ມີພຣະພາຄຍ່ອມຊົງຊາບວ່າ ຂ້າພຣະພຸທທເຈົ້າເປັນຢ່າງໃດ" ພຣະຜູ້ມີພຣະພາຄຕຣັສວ່າ "ທັພພະ ບັນທິຕຍ່ອມບໍ່ແກ້ຄຳກ່າວຫາຢ່າງນີ້ ຖ້າທ່ານທຳກໍຈົ່ງບອກວ່າທຳ ຖ້າທ່ານບໍ່ໄດ້ທຳ ກໍຈົ່ງບອກວ່າບໍ່ໄດ້ທຳ" ທ່ານພຣະທັພພມັລລບຸຕຣຂາບທູລວ່າ "ພຣະພຸທທເຈົ້າຂ້າ ຕັ້ງແຕ່ເກີດມາ ຂ້າພຣະພຸທທເຈົ້າ ບໍ່ຮູ້ຈັກກາຣເສພເມຖຸນແມ່ນໃນຄວາມຝັນ ບໍ່ຈຳຕ້ອງກ່າວເຖິງເມື່ອຕອນຕື່ນຢູ່" ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ຖ້າຢ່າງນັ້ນ ທ່ານທັງຫລາຍຈົ່ງສອບຖາມພິກສຸເຫລົ່ານີ້" ແລ້ວສເດັຈຈາກທີ່ປະທັບເຂົ້າພຣະວິຫາຣຫລັງຈາກນັ້ນ ພິກສຸທັງຫລາຍສອບຖາມພຣະເມຕຕິຍະແລະພຣະພຸມມຊກະ ເມື່ອຖືກສອບຖາມຈຶ່ງໄດ້ຮັບສາຣພາພເຣື້ອງນັ້ນ ພິກສຸທັງຫລາຍຖາມວ່າ "ພວກທ່ານອ້າງເອົາບາງສ່ວນແຫ່ງອທິກຣນ໌(ບັນຫາຂອງສົງຂ໌)ເຣື້ອງອື່ນເປັນເລສ ໃສ່ຄວາມພຣະທັພພມັລລບຸຕຣດ້ວຍອາບັຕິປາຣາຊິກຫລື" ທ່ານທັງສອງຍອມຮັບ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະເມຕຕິຍະແລະພຣະກຸມມຊກະຈຶ່ງອ້າງເອົາບາງສ່ວນແຫ່ງອທິກຣນ໌(ບັນຫາຂອງ ສົງຂ໌)ເຣື້ອງອື່ນເປັນເລສນັຍ ໃສ່ຄວາມພຣະທັພພມັລລບຸຕຣດ້ວຍອາບັຕິປາຣາຊິກລະ" ຄັນພິກສຸເຫລົ່ານັ້ນ ຕຳຫນິທ່ານທັງສອງໂດຍປະກາຣຕ່າງໆ ແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

## ຊົງປະຊຸມສົງຂ໌ບັນຍັຕສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພຣະເມຕຕິຍະແລະພຣະພຸມມຊກະວ່າ "ພິກສຸທັງຫລາຍ ຊາບວ່າພວກທ່ານອ້າງເອົາບາງສ່ວນແຫ່ງອທິກຣນ໌(ບັນຫາຂອງສົງຂ໌)ເຣື້ອງອື່ນເປັນເລສໃສ່ຄວາມທັພພມັລລບຸຕຣດ້ວຍອາບັຕິປາຣາຊິກແມ່ນແທ້ບໍ" ພວກທ່ານທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄຊົງຕຳຫນິວ່າ "ໂມຂບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງອ້າງເອົາບາງສ່ວນແຫ່ງອທິກຣນ໌(ບັນຫາຂອງສົງຂ໌)ເຣື້ອງອື່ນເປັນເລສໃສ່ຄວາມທັພພມັລລບຸຕຣ ດ້ວຍອາບັຕິປາຣາຊິກລະ ໂມຂບຸຣຸສທັງຫລາຍ ກາຣກະທຳຢ່າງ

ນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ແລ້ວຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງ ດັ່ງນີ້

ພຣະບັນຍັຕ

[໓໙໔] ກໍ ພິກສຸໃດ ຂັດເຄືອງ ມີໂທສະ ບໍ່ສົດຊື່ນ ອ້າງເອົາບາງສ່ວນແຫ່ງອທິກຣນ໌(ບັນຫາຂອງສົງຂ໌) ເຣື້ອງອື່ນເປັນເລສູໃສ່ຄວາມພິກສຸດ້ວຍອາບັຕິປາຣາຊິກ ໂດຍມຸ່ງຫມາຍວ່າ "ເຮັດຢ່າງໃດຈຶ່ງຈະໃຫ້ພິກສຸນັ້ນ ພົ້ນຈາກພຣົມຈັນຍ໌ນີ້ໄດ້" ຄັນສມັຍຕໍ່ຈາກນັ້ນ ອັນຜູ້ໃດຜູ້ນຶ່ງໂຈທກໍຕາມບໍ່ໂຈທກໍຕາມ ອທິກຣນ໌(ບັນຫາຂອງ ສົງຂ໌)ນັ້ນ ເປັນອທິກຣນ໌ເຣື້ອງອື່ນ ອ້າງເອົາບາງສ່ວນເປັນເລສູ ແລະພິກສຸຍອມຮັບຜິດ ເປັນສັງຂາທິເສສ

ເຣື້ອງພຣະເມຕຕິຍະແລະພຣະພຸມມຊກະ ຈົບ

ສິກຂາບົທວິພັງຄ໌

[໓໙໕] ຄຳວ່າ ກໍ...ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ...ໃດ
ຄຳວ່າ ພິກສຸ ມີອທິບາຍວ່າ ທີ່ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້
ຄຳວ່າ ພິກສຸ ຫມາຍເຖິງ ພິກສຸອື່ນ
ຄຳວ່າ ຂັດເຄືອງ ມີໂທສະ ຄື ໂກດ ບໍ່ພໍໃຈ ບໍ່ຊອບໃຈ ແຄ້ນໃຈ ເຈັບໃຈ
ຄຳວ່າ ບໍ່ສົດຊື່ນ ຄື ບໍ່ສົດຊື່ນເພາະຄວາມໂກດນັ້ນ ເພາະມີໂທສະນັ້ນ ເພາະບໍ່ພໍໃຈນັ້ນ ແລະເພາະບໍ່ຊອບໃຈນັ້ນ
ຄຳວ່າ ແຫ່ງອທິກຣນ໌(ບັນຫາຂອງສົງຂ໌)ເຣື້ອງອື່ນ ຄື ເປັນອາບັຕິສ່ວນອື່ນ ຫລືເປັນອທິກຣນ໌ສ່ວນອື່ນ

ອທິກຣນ໌ (ບັນຫາຂອງສົງຂ໌) ທີ່ຊື່ວ່າເປັນເຣື້ອງອື່ນຈາກອທິກຣນ໌

ອທິກຣນ໌ (ບັນຫາຂອງສົງຂ໌) ຊື່ວ່າເປັນເຣື້ອງອື່ນຈາກອທິກຣນ໌ຢ່າງໃດ
໑. ວິວາທາທິກຣນ໌ ເປັນເຣື້ອງອື່ນຈາກອນຸວາທາທິກຣນ໌ ອາປັຕຕາທິກຣນ໌ແລະກິຈຈາທິກຣນ໌
໒. ອນຸວາທາທິກຣນ໌ ເປັນເຣື້ອງອື່ນຈາກອາປັຕຕາທິກຣນ໌ ກິຈຈາທິກຣນ໌ ແລະວິວາທາທິກຣນ໌
໓. ອາປັຕຕາທິກຣນ໌ ເປັນເຣື້ອງອື່ນຈາກກິຈຈາທິກຣນ໌ ວິວາທາທິກຣນ໌ ແລະອນຸວາທາທິກຣນ໌
໔. ກິຈຈາທິກຣນ໌ ເປັນເຣື້ອງອື່ນຈາກວິວາທາທິກຣນ໌ ອນຸວາທາທິກຣນ໌ ແລະອາປັຕຕາທິກຣນ໌
ອທິກຣນ໌(ບັນຫາຂອງສົງຂ໌)ຊື່ວ່າເປັນເຣື້ອງອື່ນຈາກອທິກຣນ໌ ຢ່າງນີ້

ອທິກຣນ໌(ບັນຫາຂອງສົງຂ໌)ຊື່ວ່າເປັນເຣື້ອງດຽວກັບອທິກຣນ໌

ອທິກຣນ໌(ບັນຫາຂອງສົງຂ໌)ຊື່ວ່າເປັນເຣື້ອງດຽວກັບອທິກຣນ໌ ຢ່າງໃດ
໑. ວິວາທາທິກຣນ໌ ເປັນເຣື້ອງດຽວກັບວິວາທາທິກຣນ໌
໒. ອນຸວາທາທິກຣນ໌ ເປັນເຣື້ອງດຽວກັບອນຸວາທາທິກຣນ໌
໓. ອາປັຕຕາທິກຣນ໌ ເປັນເຣື້ອງດຽວກັບອາປັຕຕາທິກຣນ໌ກໍມີ ເປັນເຣື້ອງອື່ນຈາກອາປັຕຕາທິກຣນ໌ກໍມີ

ອາປັຕຕາທິກຣນ໌ຊື່ວ່າເປັນເຣື້ອງອື່ນຈາກອາປັຕຕາທິກຣນ໌

ອາປັຕຕາທິກຣນ໌ຊື່ວ່າເປັນເຣື້ອງອື່ນຈາກອາປັຕຕາທິກຣນ໌ຢ່າງໃດ
໑. ເມຖຸນທັມປາຣາຊິກາບັຕິ ເປັນເຣື້ອງອື່ນຈາກອທິນນາທານປາຣາຊິກາບັຕິ ມນຸສສວິຄຄຫປາຣາຊິກາບັຕິ ແລະອຸຕຕຣິມນຸສສທັມປາຣາຊິກາບັຕິ
໒. ອທິນນາທານປາຣາຊິກາບັຕິ ເປັນເຣື້ອງອື່ນຈາກມນຸສສວິຄຄຫປາຣາຊິກາບັຕິ ອຸຕຕຣິມນຸສສທັມປາຣາຊິກາບັຕິ ແລະເມຖຸນທັມປາຣາຊິກາບັຕິ
໓. ມນຸສສວິຄຄຫປາຣາຊິກາບັຕິ ເປັນເຣື້ອງອື່ນຈາກອຸຕຕຣິມນຸສສທັມປາຣາຊິກາບັຕິ ເມຖຸນທັມປາຣາຊິກາບັຕິ ແລະອທິນນາທານປາຣາຊິກາບັຕິ
໔. ອຸຕຕຣິມນຸສສທັມປາຣາຊິກາບັຕິ ເປັນເຣື້ອງອື່ນຈາກເມຖຸນທັມປາຣາຊິກາບັຕິ ອທິນນາທານປາຣາຊິກາບັຕິ ແລະມນຸສສວິຄຄຫປາຣາຊິກາບັຕິ
ອາປັຕຕາທິກຣນ໌ຊື່ວ່າເປັນເຣື້ອງອື່ນຈາກອາປັຕຕາທິກຣນ໌ ຢ່າງນີ້

ອາປັຕຕາທິກຣນ໌ຊື່ວ່າເປັນເຣື້ອງດຽວກັບອາປັຕຕາທິກຣນ໌

ອາປັຕຕາທິກຣນ໌ຊື່ວ່າເປັນເຣື້ອງດຽວກັບອາປັຕຕາທິກຣນ໌ຢ່າງໃດ

໑. ເມຖຸນທັມປາຣາຊິກາບັຕິ ເປັນເຣື້ອງດຽວກັບເມຖຸນທັມປາຣາຊິກາບັຕິ

໔. ອທິນນາທານປາຣາຊິກາບັຕິ ເປັນເຣື້ອງດຽວກັບອທິນນາທານປາຣາຊິກາບັຕິ

໓. ມນຸສສວິຄຄຫປາຣາຊິກາບັຕິ ເປັນເຣື້ອງດຽວກັນກັບມນຸສສວິຄຄຫປາຣາຊິກາບັຕິ

໔. ອຸຕຕຣິມນຸສສທັມປາຣາຊິກາບັຕິ ເປັນເຣື້ອງດຽວກັບອຸຕຕຣິມນຸສສທັມ ປາຣາຊິກາບັຕິ

ອາບັຕຕາທິກຣນ໌ຊື່ວ່າເປັນເຣື້ອງດຽວກັບອາປັຕຕາທິກຣນ໌ ຢ່າງນີ້

ກິຈຈາທິກຣນ໌ເປັນເຣື້ອງດຽວກັບກິຈຈາທິກຣນ໌

ອທິກຣນ໌(ບັນຫາຂອງສົງຂ໌)ຊື່ວ່າເປັນເຣື້ອງດຽວກັບອທິກຣນ໌ ຢ່າງນີ້

## ເລສ ໑໐ ຢ່າງ

[໓�womano໔] ຊື່ວ່າ ເລສ ໃນຄຳວ່າ ອ້າງເອົາບາງສ່ວນ...ເປັນເລສ ອທິບາຍວ່າ

ເລສມີ ໑໐ ຢ່າງໄດ້ແກ່ ເລສຄືຊາຕິກຳເນີດ ໑ ເລສຄືຊື່ ໑ ເລສຄືຕະກູນ ໑ ເລສຄືຣູປລັກສນ໌ ໑ ເລສຄືອາບັຕິ ໑ ເລສຄືບາຕຣ ໑ ເລສຄືຈີວອນ ໑ ເລສຄືພຣະອຸປັຊຢາຍ໌ ໑ ເລສຄືພຣະອາຈາຣຍ໌ ໑ ເລສຄືເສນາສນະ ໑

## ອທິບາຍເລສ ໑໐ ຢ່າງ

[໓໙໕] ຊື່ວ່າ ເລສຄືຊາຕິກຳເນີດ ອທິບາຍວ່າ ພິກສຸຜູ້ໂຈທກ໌ໄດ້ເຫັນພິກສຸຜູ້ເປັນອັນນະກສັຕຣິຍ໌ຕ້ອງອາບັຕິປາຣາຊິກ ຄັນເຫັນພິກສຸອີກຣູບນຶ່ງຜູ້ເປັນອັນນະກສັຕຣິຍ໌ຈຶ່ງໂຈທວ່າ “ຂ້າພະເຈົ້າເຫັນພິກສຸຜູ້ເປັນອັນນະກສັຕຣິຍ໌ຕ້ອງອາບັຕິປາຣາຊິກແລ້ວ ທ່ານບໍ່ເປັນສມນະ ບໍ່ເປັນເຊື້ອສາຍສາກຍບຸຕຣ ທ່ານຮ່ວມອຸໂບສົຖ ປວາຣນາຫລືສັງຂກັມບໍ່ໄດ້” ຕ້ອງອາບັຕິສັງຂາທິເສສ ທຸກໆ ຄຳເວົ້າ ພິກສຸຜູ້ໂຈທກ໌ໄດ້ເຫັນພິກສຸຜູ້ເປັນອັນນະພຣາມນ໌ ຯລຯ ເຫັນພິກສຸຜູ້ເປັນອັນນະແພສຍ໌ ຯລຯ ເຫັນພິກສຸຜູ້ເປັນອັນນະສູທຣຕ້ອງອາບັຕິປາຣາຊິກ ຄັນເຫັນພິກສຸອີກຣູບນຶ່ງ ຜູ້ເປັນອັນນະສູທຣຈຶ່ງໂຈທວ່າ “ຂ້າພະເຈົ້າເຫັນພິກສຸຜູ້ເປັນອັນນະສູທຣຕ້ອງອາບັຕິປາຣາຊິກ ທ່ານບໍ່ເປັນສມນະ ບໍ່ເປັນເຊື້ອສາຍສາກຍບຸຕຣ ຯລຯ” ຕ້ອງອາບັຕິສັງຂາທິເສສທຸກໆ ຄຳເວົ້າ

[໓໙໖] ຊື່ວ່າ ເລສຄືຊື່ ອທິບາຍວ່າ ພິກສຸຜູ້ໂຈທກ໌ໄດ້ເຫັນພຣະພຸທທຣັກຂິຕ ຯລຯ ໄດ້ເຫັນພຣະທັມມຣັກຂິຕ ຯລຯ ໄດ້ເຫັນພຣະສັງຂຣັກຂິຕຕ້ອງອາບັຕິປາຣາຊິກ ຄັນເຫັນພິກສຸອີກຣູບນຶ່ງ

ຜູ້ຊື່ວ່າສັງຂຣັກຂິຕຈຶ່ງໂຈທວ່າ “ຂ້າພະເຈົ້າເຫັນພຣະສັງຂຣັກຂິຕຕ້ອງອາບັຕິປາຣາຊິກແລ້ວ ທ່ານບໍ່ເປັນສມນະ ບໍ່ເປັນເຊື້ອສາຍສາກຍບຸຕຣ ຯລຯ” ຕ້ອງອາບັຕິສັງຂາທິເສສ ທຸກໆ ຄຳເວົ້າ

[໓໙໗] ຊື່ວ່າ ເລສຄືຕະກູນ ອທິບາຍວ່າ ພິກສຸຜູ້ໂຈທກ໌ ໄດ້ເຫັນພິກສຸໃນຕະກູນໂຄຕມະ ຯລຯ ໄດ້ເຫັນພິກສຸໃນຕະກູນໂມຄຄັລລານະ ຯລຯ ໄດ້ເຫັນພິກສຸໃນຕະກູນກັຈຈາຍນະ ຯລຯ ໄດ້ເຫັນພິກສຸໃນຕະກູນວາສິຕຖະຕ້ອງອາບັຕິປາຣາຊິກ ຄັນເຫັນພິກສຸອີກຮູບນຶ່ງໃນຕະກູນວາສິຕຖະຈຶ່ງໂຈທວ່າ ຂ້າພະເຈົ້າເຫັນພິກສຸໃນຕະກູນວາສິຕຖະຕ້ອງອາບັຕິປາຣາຊິກແລ້ວ ທ່ານບໍ່ເປັນສມນະ ບໍ່ເປັນເຊື້ອສາຍສາກຍບຸຕຣ ຯລຯ ຕ້ອງອາບັຕິສັງຂາທິເສສ ທຸກໆ ຄຳເວົ້າ

[໓໙໘] ຊື່ວ່າ ເລສຄືຮູປລັກສນ໌ ອທິບາຍວ່າ ພິກສຸຜູ້ໂຈທກ໌ ໄດ້ເຫັນພິກສຸສູງ ຯລຯ ໄດ້ເຫັນພິກສຸຕ່ຳ ຯລຯ ໄດ້ເຫັນພິກສຸຜິວດຳ ຯລຯ ໄດ້ເຫັນພິກສຸຜິວຂາວຕ້ອງປາຣາຊິກ ຄັນເຫັນພິກສຸອີກຮູບນຶ່ງຜູ້ມີຜິວຂາວຈຶ່ງໂຈທວ່າ “ຂ້າພະເຈົ້າເຫັນພິກສຸຜິວຂາວຕ້ອງອາບັຕິປາຣາຊິກແລ້ວ ທ່ານບໍ່ເປັນສມນະ ບໍ່ເປັນເຊື້ອສາຍສາກຍບຸຕຣ ຯລຯ” ຕ້ອງອາບັຕິສັງຂາທິເສສ ທຸກໆຄຳເວົ້າ

[໓໙໙] ຊື່ວ່າ ເລສຄືອາບັຕິ ອທິບາຍວ່າ ພິກສຸຜູ້ໂຈທກ໌ ເຫັນພິກສຸຕ້ອງອາບັຕິເບົາ ຖ້າໂຈທພິກສຸນັ້ນດ້ວຍອາບັຕິປາຣາຊິກວ່າ ຂ້າພະເຈົ້າເຫັນທ່ານຕ້ອງອາບັຕິປາຣາຊິກແລ້ວ ທ່ານບໍ່ເປັນສມນະ ບໍ່ເປັນເຊື້ອສາຍສາກຍບຸຕຣ ຯລຯ ຕ້ອງອາບັຕິສັງຂາທິເສສ ທຸກໆ ຄຳເວົ້າ

[໔໐໐] ຊື່ວ່າ ເລສຄືບາຕຣ ອທິບາຍວ່າ ພິກສຸຜູ້ໂຈທກ໌ໄດ້ເຫັນພິກສຸໃຊ້ບາຕຣໂລຫະ ຯລຯ ໄດ້ເຫັນພິກສຸໃຊ້ບາຕຣດິນຫນຽວ ຯລຯ ໄດ້ເຫັນພິກສຸໃຊ້ບາຕຣເຄລືອບ ຯລຯ ໄດ້ເຫັນພິກສຸໃຊ້ບາຕຣດິນທັມດາ ຕ້ອງອາບັຕິປາຣາຊິກ ຄັນເຫັນພິກສຸອີກຮູບນຶ່ງໃຊ້ບາຕຣດິນທັມດາຈຶ່ງໂຈທວ່າ ຂ້າພະເຈົ້າເຫັນພິກສຸໃຊ້ບາຕຣດິນທັມດາຕ້ອງອາບັຕິປາຣາຊິກແລ້ວ ທ່ານບໍ່ເປັນສມນະ ບໍ່ເປັນເຊື້ອສາຍສາກຍບຸຕຣ ຯລຯ ຕ້ອງອາບັຕິສັງຂາທິເສສ ທຸກໆ ຄຳເວົ້າ

[໔໐໑] ຊື່ວ່າ ເລສຄືຈີວອນ ອທິບາຍວ່າ ພິກສຸຜູ້ໂຈທກ໌ ໄດ້ເຫັນພິກສຸຜູ້ໃຊ້ຜ້າບັງສຸກຸລ ຯລຯ ເຫັນພິກສຸຜູ້ໃຊ້ຜ້າຄຫບໍດີ ຕ້ອງອາບັຕິປາຣາຊິກ ຄັນໄດ້ເຫັນພິກສຸອີກຮູບນຶ່ງຜູ້ໃຊ້ຜ້າຄຫບໍດີຈຶ່ງໂຈທວ່າ ຂ້າພະເຈົ້າໄດ້ເຫັນພິກສຸຜູ້ໃຊ້ຜ້າຂອງຄຫບໍດີຕ້ອງອາບັຕິປາຣາຊິກແລ້ວທ່ານບໍ່ເປັນສມນະ ບໍ່ເປັນເຊື້ອສາຍສາກຍບຸຕຣ ຯລຯ ຕ້ອງອາບັຕິສັງຂາທິເສສ ທຸກໆ ຄຳເວົ້າ

[໔໐໒] ຊື່ວ່າ ເລສູຄືພຣະອຸປັຊຍາຍ໌ ອທິບາຍວ່າ ພິກສຸຜູ້ໂຈທກ໌ໄດ້ເຫັນພິກສຸຜູ້ເປັນສັທທິວິຫາຣິກຂອງພຣະອຸປັຊຍາຍ໌ຊື່ນີ້ ຕ້ອງອາບັຕິປາຣາຊິກ ຄັນເຫັນພິກສຸອີກຮູບນຶ່ງຜູ້ເປັນສັທທິວິຫາຣິກຂອງພຣະອຸປັຊຍາຍ໌ຊື່ນີ້ຈຶ່ງໂຈທວ່າ ຂ້າພະເຈົ້າເຫັນພິກສຸຜູ້ເປັນສັທທິວິຫາຣິກຂອງພຣະອຸປັຊຍາຍ໌ຊື່ນີ້ ຕ້ອງອາບັຕິປາຣາຊິກແລ້ວ ທ່ານບໍ່ເປັນສມນະ ບໍ່ເປັນເຊື້ອສາຍສາກຍບຸຕຣ ຯລຯ ຕ້ອງອາບັຕິສັງຂາທິເສສ ທຸກໆ ຄຳເວົ້າ

[໔໐໓] ຊື່ວ່າ ເລສູຄືອາຈາຣຍ໌ ອທິບາຍວ່າ ພິກສຸຜູ້ໂຈທກ໌ໄດ້ເຫັນພິກສຸຜູ້ເປັນອັນເຕວາສິກຂອງພຣະອາຈາຣຍ໌ ຊື່ນີ້ຕ້ອງອາບັຕິປາຣາຊິກ ຄັນເຫັນພິກສຸອີກຮູບນຶ່ງຜູ້ເປັນອັນເຕວາສິກຂອງພຣະອາຈາຣຍ໌ຊື່ນີ້ ຈຶ່ງໂຈທວ່າ ຂ້າພະເຈົ້າເຫັນພິກສຸຜູ້ເປັນອັນເຕວາສິກຂອງພຣະອາຈາຣຍ໌ຊື່ນີ້ຕ້ອງອາບັຕິປາຣາຊິກແລ້ວ ທ່ານບໍ່ເປັນສມນະ ບໍ່ເປັນເຊື້ອສາຍສາກຍບຸຕຣ ຯລຯ ຕ້ອງອາບັຕິສັງຂາທິເສສ ທຸກໆຄຳເວົ້າ

[໔໐໔] ຊື່ວ່າ ເລສູຄືເສນາສນະ ອທິບາຍວ່າ ພິກສຸຜູ້ໂຈທກ໌ໄດ້ເຫັນພິກສຸຢູ່ໃນເສນາສນະຊື່ນີ້ ຕ້ອງອາບັຕິປາຣາ ຊິກ ຄັນເຫັນພິກສຸອີກຮູບນຶ່ງຢູ່ໃນເສນາສນະຊື່ນີ້ຈຶ່ງໂຈທວ່າ "ຂ້າພະເຈົ້າເຫັນພິກສຸຜູ້ຢູ່ໃນເສນາສນະຊື່ນີ້ ຕ້ອງອາບັຕິປາຣາຊິກແລ້ວ ທ່ານບໍ່ເປັນສມນະ ບໍ່ເປັນເຊື້ອສາຍສາກຍບຸຕຣ ທ່ານຮ່ວມອຸໂບສົຖ ປວາຣນາ

ຫລື ສັງຂກັມບໍ່ໄດ້" ຕ້ອງອາບັຕິສັງຂາທິເສສ ທຸກໆຄຳເວົ້າ

## ສິກຂາບົທວິພັງຄ໌

[໔໐໕] ຄຳວ່າ ດ້ວຍອາບັຕິປາຣາຊິກ ຄື ດ້ວຍອາບັຕິປາຣາຊິກ ໔ ຂໍ້ໃດຂໍ້ນຶ່ງ
ຄຳວ່າ ໃສ່ຄວາມ ໄດ້ແກ່ ໂຈທເອງ ຫລືສັ່ງໃຫ້ຜູ້ອື່ນໂຈທ
ຄຳວ່າ ເຮັດຢ່າງໃດຈຶ່ງຈະໃຫ້ພິກສຸນັ້ນພົ້ນຈາກພຣົມຈັນຍ໌ນີ້ໄດ້ ຄວາມວ່າ ໃຫ້ພົ້ນຈາກຄວາມເປັນພິກສຸ ໃຫ້ ພົ້ນຈາກສມນະທັມ ໃຫ້ພົ້ນຈາກສີລຂັນທ໌ ໃຫ້ພົ້ນຈາກຄຸນຄືຕບະ
ຄຳວ່າ ຄັນສມັຍຕໍ່ຈາກນັ້ນ ຄວາມວ່າ ລ່ວງຂນະ ລຍະ ຄູ່ທີ່ພິກສຸຖືກໃສ່ຄວາມໄປແລ້ວ
ຄຳວ່າ ອັນຜູ້ໃດຜູ້ນຶ່ງໂຈທກໍຕາມ ຄື ຈະມີຜູ້ເຊື່ອຖືຕາມເຣື່ອງທີ່ເຮັດໃຫ້ພິກສຸນັ້ນຖືກໃສ່ຄວາມກໍຕາມ
ຄຳວ່າ ບໍ່ໂຈທກໍຕາມ ຄື ບໍ່ມີໃຜໆ ກ່າວເຖິງພິກສຸນັ້ນ

ຊື່ວ່າ ອທິກຣນ໌(ບັນຫາຂອງສົງຂ໌) ໄດ້ແກ່ ອທິກຣນ໌ ໔ ຢ່າງຄື ວິວາທາທິກຣນ໌ ອນຸວາທາທິກຣນ໌ ອາປັຕຕາທິກຣນ໌ ແລະກິຈຈາທິກຣນ໌

ຄຳວ່າ ອ້າງເອົາບາງສ່ວນ...ເປັນເລສ ຄື ຖືເອົາເລສ ໑໐ ຢ່າງນັ້ນ ຢ່າງໃດຢ່າງນຶ່ງ

ຄຳວ່າ ແລະພິກສຸຍອມຮັບຜິດ ຄວາມວ່າ ພິກສຸນັ້ນຍອມຮັບວ່າ "ຂ້າພະເຈົ້າເວົ້າຄຳໄຮ້ປໂຍດ ເວົ້າເທັຈ ເວົ້າບໍ່ແມ່ນແທ້ບໍ່ຮູ້ຈິງເວົ້າ"

ຄຳວ່າ ສັງຂາທິເສສ ຄວາມວ່າ ສຳລັບອາບັຕິນັ້ນ ສົງຂ໌ເທົ່ານັ້ນໃຫ້ປຣິວາສ ຯລຯ ເພາະເຫຕຸນັ້ນ ພຣະຜູ້ມີພຣະພາຄຈຶ່ງຕຣັສຮຽກວ່າ "ເປັນສັງຂາທິເສສ"

ບົທພາຊນີຍ໌

ເອເກກມູລຈັກຣ

ໂຈທພິກສຸຜູ້ຕ້ອງອາບັຕິສັງຂາທິເສສ

[໔໐໓] ພິກສຸຜູ້ໂຈທກ໌ໄດ້ເຫັນພິກສຸຕ້ອງອາບັຕິສັງຂາທິເສສ ມີຄວາມເຫັນອາບັຕິສັງຂາທິເສສວ່າເປັນອາບັຕິສັງຂາທິເສສ ຖ້າທ່ານໂຈທພິກສຸນັ້ນດ້ວຍອາບັຕິປາຣາຊິກວ່າ "ທ່ານບໍ່ເປັນສມນະ ບໍ່ເປັນເຊື້ອສາຍສາກຍບຸຕຣ ທ່ານຮ່ວມອຸໂບສົຖ ປວາຣນາຫລືສັງຂກັມບໍ່ໄດ້" ແມ່ນຢ່າງນີ້ ອທິກຣນ໌(ບັນຫາຂອງສົງຂ໌)ນັ້ນຍ່ອມເປັນຂໍ້ອື່ນ ແລະທ່ານອ້າງເອົາເປັນເລສ ຕ້ອງອາບັຕິສັງຂາທິເສສ ທຸກ ໆ ຄຳເວົ້າ

ພິກສຸຜູ້ໂຈທກ໌ໄດ້ເຫັນພິກສຸຕ້ອງອາບັຕິສັງຂາທິເສສ ແຕ່ມີຄວາມເຫັນອາບັຕິສັງຂາທິເສສວ່າເປັນອາບັຕິຖຸລ ລັຈຈັຍ ຖ້າທ່ານໂຈທພິກສຸນັ້ນດ້ວຍອາບັຕິປາຣາຊິກວ່າ "ທ່ານບໍ່ເປັນສມນະ ຯລຯ" ແມ່ນຢ່າງນີ້ ອທິກຣນ໌(ບັນຫາຂອງສົງຂ໌) ນັ້ນ ຍ່ອມເປັນອາບັຕິຂ້ອອື່ນແລະທ່ານອ້າງເອົາເປັນເລສ ຕ້ອງອາບັຕິສັງຂາທິເສສ ທຸກໆ ຄຳເວົ້າ

ພິກສຸຜູ້ໂຈທກ໌ໄດ້ເຫັນພິກສຸຕ້ອງອາບັຕິສັງຂາທິເສສ ແຕ່ມີຄວາມເຫັນອາບັຕິສັງຂາທິເສສວ່າເປັນອາບັຕິປາຈິຕ ຕີຍ໌ ຖ້າທ່ານໂຈທພິກສຸນັ້ນດ້ວຍອາບັຕິປາຣາຊິກວ່າ "ທ່ານບໍ່ເປັນສມນະ" ຯລຯ ແມ່ນຢ່າງນີ້ ອທິກຣນ໌(ບັນຫາຂອງສົງຂ໌)ນັ້ນຍ່ອມເປັນອາບັຕິຂ້ອອື່ນແລະທ່ານອ້າງເອົາເປັນເລສ ຕ້ອງອາບັຕິສັງຂາທິເສສ ທຸກໆຄຳເວົ້າ

ພິກສຸຜູ້ໂຈທກ໌ໄດ້ເຫັນພິກສຸຕ້ອງອາບັຕິສັງຄາທິເສສ ແຕ່ມີຄວາມເຫັນອາບັຕິສັງຄາທິເສສວ່າເປັນອາບັຕິປາຕິເທສນີຍະ ຯລຯ ມີຄວາມເຫັນອາບັຕິສັງຄາທິເສສວ່າເປັນອາບັຕິທຸກກົຕ ຯລຯ ມີຄວາມເຫັນອາບັຕິສັງຄາທິ ເສສວ່າເປັນອາບັຕິທຸພພາສິຕ ຖ້າທ່ານໂຈທພິກສຸນັ້ນດ້ວຍອາບັຕິປາຣາຊິກວ່າ "ທ່ານບໍ່ເປັນສມນະ ຯລຯ" ແມ່ນຢ່າງນີ້ ອທິກຣນ໌(ບັນຫາຂອງສົງຄ໌)ນັ້ນ ຍ່ອມເປັນອາບັຕິຂ້ອອື່ນ ແລະທ່ານອ້າງເອົາເປັນເລສູ ຕ້ອງອາບັຕິສັງຄາທິເສສ ທຸກໆຄໍາເວົ້າ

## ໂຈທພິກສຸຜູ້ຕ້ອງອາບັຕິຖຸລລັຈຈັຍ

ພິກສຸຜູ້ໂຈທກ໌ໄດ້ເຫັນພິກສຸຕ້ອງອາບັຕິຖຸລລັຈຈັຍ ມີຄວາມເຫັນອາບັຕິຖຸລລັຈຈັຍວ່າເປັນອາບັຕິຖຸລລັຈຈັຍ ຯລຯ ມີຄວາມເຫັນອາບັຕິຖຸລລັຈຈັຍວ່າເປັນອາບັຕິປາຈິຕຕີຍ໌ ຯລຯ ມີຄວາມເຫັນອາບັຕິຖຸລລັຈຈັຍວ່າເປັນອາບັຕິປາຕິເທສນີຍະ ຯລຯ ມີຄວາມເຫັນອາບັຕິຖຸລລັຈຈັຍ ວ່າເປັນອາບັຕິທຸກກົຕ ຯລຯ ມີຄວາມເຫັນອາບັຕິຖຸລລັຈຈັຍວ່າເປັນອາບັຕິທຸພພາສິຕ ຯລຯ ມີຄວາມເຫັນອາບັຕິຖຸລລັຈຈັຍວ່າເປັນອາບັຕິສງຄາທິເສສ ຖ້າໂຈທພິກສຸນັ້ນດ້ວຍອາບັຕິປາຣາຊິກວ່າ "ທ່ານບໍ່ເປັນສມນະ ຯລຯ" ແມ່ນຢ່າງນີ້ ອທິກຣນ໌(ບັນຫາຂອງສົງຄ໌)ນັ້ນຍ່ອມເປັນອາບັຕິຂ້ອອື່ນແລະທ່ານອ້າງເອົາເປັນເລສູຕ້ອງອາບັຕິສັງຄາທິເສສ ທຸກໆຄໍາເວົ້າ

## ໂຈທພິກສຸຜູ້ຕ້ອງປາຈິຕຕີຍ໌...ປາຕິເທສນີຍະ...ທຸກກົຕ...ທຸພພາສິຕ

ພິກສຸຜູ້ໂຈທກ໌ໄດ້ເຫັນພິກສຸຕ້ອງອາບັຕິປາຈິຕຕີຍ໌ ຯລຯ ພິກສຸຜູ້ໂຈທກ໌ໄດ້ເຫັນພິກສຸ ຕ້ອງອາບັຕິປາຕິເທສນີຍະ ຯລຯ ພິກສຸຜູ້ໂຈທກ໌ໄດ້ເຫັນພິກສຸຕ້ອງອາບັຕິທຸກກົຕ ຯລຯ ພິກສຸຜູ້ໂຈທກ໌ໄດ້ເຫັນພິກສຸຕ້ອງອາບັຕິທຸພພາສິຕ ມີຄວາມເຫັນອາບັຕິທຸພພາສິຕວ່າເປັນອາບັຕິທຸພພາສິຕ ຯລຯ ມີຄວາມເຫັນອາບັຕິທຸພພາສິຕວ່າເປັນອາບັຕິສັງຄາທິເສສ ຯລຯ ມີຄວາມເຫັນອາບັຕິທຸພພາສິຕວ່າເປັນອາບັຕິຖຸລລັຈຈັຍ ຯລຯ ມີຄວາມເຫັນອາບັຕິທຸພພາສິຕວ່າເປັນອາບັຕິປາຈິຕຕີຍ໌ ຯລຯ ມີຄວາມເຫັນອາບັຕິທຸພພາສິຕວ່າເປັນອາບັຕິປາຕິເທສນີຍະ ຯລຯ ມີຄວາມເຫັນອາບັຕິທຸພພາສິຕວ່າເປັນອາບັຕິທຸກກົຕ ຖ້າໂຈທພິກສຸນັ້ນດ້ວຍອາບັຕິປາຣາຊິກວ່າ "ທ່ານບໍ່ເປັນສມນະ ບໍ່ເປັນເຊື້ອສາຍສູກຍບຸຕຣ ທ່ານຮ່ວມອຸໂບສົຖ ປວາຣນາຫລືສັງຄກັມບໍ່ໄດ້" ແມ່ນຢ່າງນີ້ ອທິກຣນ໌(ບັນຫາຂອງສົງຄ໌)ນັ້ນຍ່ອມເປັນອາບັຕິຂ້ອອື່ນແລະທ່ານອ້າງເອົາເປັນເລສູ ຕ້ອງອາບັຕິສັງຄາທິເສສ ທຸກໆຄໍາເວົ້າ

ເພິ່ງຮວມອາບັຕິແຕ່ລະຢ່າງໆ ໃຫ້ເປັນມູລແລ້ວຜູກເປັນຈັກຣ

## ສັ່ງໃຫ້ໂຈທພິກສຸຜູ້ຕ້ອງອາບັຕິສັງຂາທິເສສ

[໔໐໗] ພິກສຸຜູ້ໂຈທກ໌ໄດ້ເຫັນພິກສຸຕ້ອງອາບັຕິສັງຂາທິເສສ ມີຄວາມເຫັນອາບັຕິສັງຂາທິເສສວ່າເປັນອາບັຕິສັງຂາທິເສສ ຖ້າສັ່ງໃຫ້ໂຈທພິກສຸນັ້ນດ້ວຍອາບັຕິປາຣາຊິກວ່າ "ທ່ານບໍ່ເປັນສມນະ ຯລຯ" ແມ່ນຢ່າງນີ້ ອທິກຣຸນ໌(ບັນຫາຂອງສົງຂ໌)ນັ້ນຍ່ອມເປັນອາບັຕິຂໍ້ອື່ນແລະທ່ານອ້າງເອົາເປັນເລສູ ຕ້ອງອາບັຕິສັງຂາທິເສສ ທຸກໆ ຄໍາເວົ້າ

ພິກສຸຜູ້ໂຈທກ໌ໄດ້ເຫັນພິກສຸຕ້ອງອາບັຕິສັງຂາທິເສສ ແຕ່ມີຄວາມເຫັນອາບັຕິສັງຂາທິເສສວ່າເປັນອາບັຕິຖຸລລັຈຈັຍ ຯລຯ ມີຄວາມເຫັນອາບັຕິສັງຂາທິເສສວ່າເປັນອາບັຕິປາຈິຕຕີຍ໌ ຯລຯ ມີຄວາມເຫັນອາບັຕິສັງຂາທິເສສວ່າເປັນອາບັຕິປາຕິເທສນີຍະ ຯລຯ ມີຄວາມເຫັນອາບັຕິສັງຂາທິເສສວ່າເປັນອາບັຕິທຸກກຕ ຯລຯ ມີຄວາມເຫັນອາບັຕິສັງຂາທິເສສ ວ່າເປັນອາບັຕິທຸພພາສິຕ ຖ້າສັ່ງໃຫ້ໂຈທພິກສຸນັ້ນດ້ວຍອາບັຕິປາຣາຊິກວ່າ "ທ່ານບໍ່ເປັນສມນະ ຯລຯ" ແມ່ນຢ່າງນີ້ ອທິກຣຸນ໌(ບັນຫາຂອງສົງຂ໌)ນັ້ນຍ່ອມເປັນອາບັຕິຂໍ້ອື່ນແລະທ່ານອ້າງເອົາເປັນເລສູ ຕ້ອງອາບັຕິສັງຂາທິເສສ ທຸກ ໆ ຄໍາເວົ້າ

## ສັ່ງໃຫ້ໂຈທພິກສຸຜູ້ຕ້ອງອາບັຕິຖຸລລັຈຈັຍ

ພິກສຸຜູ້ໂຈທກ໌ໄດ້ເຫັນພິກສຸຕ້ອງອາບັຕິຖຸລລັຈຈັຍ ມີຄວາມເຫັນອາບັຕິຖຸລລັຈຈັຍວ່າເປັນອາບັຕິຖຸລລັຈຈັຍ ຯລຯ ມີຄວາມເຫັນອາບັຕິຖຸລລັຈຈັຍວ່າເປັນອາບັຕິປາຈິຕຕີຍ໌ ຯລຯ ມີຄວາມເຫັນອາບັຕິຖຸລລັຈຈັຍວ່າເປັນອາບັຕິປາຕິເທສນີຍະ ຯລຯ ມີຄວາມເຫັນອາບັຕິຖຸລລັຈຈັຍວ່າເປັນອາບັຕິທຸກກຕ ຯລຯ ມີຄວາມເຫັນອາບັຕິຖຸລລັຈຈັຍວ່າເປັນອາບັຕິທຸພພາສິຕ ຯລຯ ມີຄວາມເຫັນອາບັຕິຖຸລລັຈຈັຍວ່າເປັນອາບັຕິສັງຂາທິເສສ ຖ້າສັ່ງໃຫ້ໂຈທພິກສຸນັ້ນດ້ວຍອາບັຕິປາຣາຊິກວ່າ "ທ່ານບໍ່ເປັນສມນະ ຯລຯ" ແມ່ນຢ່າງນີ້ ອທິກຣຸນ໌(ບັນຫາຂອງສົງຂ໌)ຍ່ອມເປັນອາບັຕິຂໍ້ອື່ນແລະທ່ານອ້າງເອົາເປັນເລສູ ຕ້ອງອາບັຕິສັງຂາທິເສສ ທຸກໆຄໍາເວົ້າ

## ສັ່ງໃຫ້ໂຈທພິກສຸຜູ້ຕ້ອງອາບັຕິປາຈິຕຕີຍ໌...ປາຕິເທສນີຍະ...ທຸກກຕ ...ທຸພພາສິຕ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ສັງຊາທິເສສກັນຫ໌] ໙. ທຸຕິຍທຸດຖໂທສສິກຂາບົທ ອນາປັຕຕິວາຣ

ພິກສຸຜູ້ໂຈທກ໌ໄດ້ເຫັນພິກສຸຕ້ອງອາບັຕິປາຈິຕຕີຍ໌ ຯລຯ ພິກສຸຜູ້ໂຈທກ໌ໄດ້ເຫັນພິກສຸ ຕ້ອງອາບັຕິປາຕິເທສນີຍະ ຯລຯ ພິກສຸຜູ້ໂຈທກ໌ໄດ້ເຫັນພິກສຸຕ້ອງອາບັຕິທຸກກຕ ຯລຯ ພິກສຸຜູ້ໂຈທກ໌ໄດ້ເຫັນພິກສຸຕ້ອງອາບັຕິທຸພພາສິຕ ມີຄວາມເຫັນອາບັຕິທຸພພາສິຕວ່າເປັນອາບັຕິ ທຸພພາສິຕ ຯລຯ ມີຄວາມເຫັນອາບັຕິທຸພພາສິຕວ່າເປັນອາບັຕິສັງຊາທິເສສ ຯລຯ ມີຄວາມເຫັນອາບັຕິທຸພພາສິຕວ່າເປັນອາບັຕິຖຸລລັຈຈັຍ ຯລຯ ມີຄວາມເຫັນອາບັຕິທຸພພາສິຕວ່າເປັນອາບັຕິປາຈິຕຕີຍ໌ ຯລຯ ມີຄວາມເຫັນອາບັຕິທຸພພາສິຕວ່າເປັນອາບັຕິປາຕິເທສນີຍະ ຯລຯ ມີຄວາມເຫັນອາບັຕິທຸພພາສິຕວ່າເປັນອາບັຕິທຸກກຕ ຖ້າສັ່ງໃຫ້ໂຈທພິກສຸນັ້ນດ້ວຍອາບັຕິປາຣາຊິກວ່າ "ທ່ານບໍ່ເປັນສມນະ ບໍ່ເປັນເຊື້ອສາຍສາກຍບຸຕຣ ທ່ານຮ່ວມອຸໂບສົຖ ປວາຣນາຫລືສັງຊກັມບໍ່ໄດ້" ແມ່ນຢ່າງນີ້ ອທິກຣນ໌(ບັນຫາຂອງສົງຊ໌)ນັ້ນຍ່ອມເປັນອາບັຕິຂໍ້ອື່ນແລະທ່ານອ້າງເອົາເປັນເລສ ຕ້ອງອາບັຕິ ສັງຊາທິເສສ ທຸກໆຄຳເວົ້າ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໔໐໗] ໑. ພິກສຸຜູ້ສຳຄັນວ່າເປັນຢ່າງນັ້ນ ໂຈທເອງຫລືສັ່ງໃຫ້ຜູ້ອື່ນໂຈທ

໔. ພິກສຸວິກົລຈິຕ

໓. ພິກສຸຕົ້ນບັນຍັຕ

ທຸຕິຍທຸຕຖໂທສສິກຂາບົທທີ ໙ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ສັງຊາທິເສສກັນຫ໌] ໑໐. ສັງຊເພທສິກຂາບົທ ນິທານວັຕຖຸ

໑໐. ສັງຊເພທສິກຂາບົທ

ວ່າດ້ວຍການທຳສົງຊ໌ໃຫ້ແຕກກັນ

ເຣື່ອງພຣະເທວທັຕ

[໔໐ລ] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເວຣຸວັນ ສຖານທີ່ໃຫ້ເຫຍື່ອກະແຕ ເຂດກຸງຣາຊຄຶຫ໌ ຄັ້ງນັ້ນ ພຣະເທວທັຕເຂົ້າໄປຫາພຣະໂກກາລິກະ ພຣະກຕໂມຣກຕິສສກະ ພຣະຂັນທເທວີບຸຕຣ ແລະພຣະສມຸທທທັຕເຖິງທີ່ຢູ່ ຄັນເຖິງແລ້ວໄດ້ກ່າວກັບທ່ານເຫລົ່ານັ້ນດັ່ງນີ້ວ່າ "ມາເຖີດ ທ່ານທັງຫລາຍ ພວກເຮົາຈະທຳລາຍສົງຊ໌ ທຳລາຍຈັກຣ ຂອງພຣະສມນະໂຄດົມ" ເມື່ອພຣະເທວທັຕກ່າວຢ່າງນີ້ ພຣະໂກກາລິກະໄດ້ກ່າວກັບພຣະເທວທັຕດັ່ງນີ້ວ່າ "ພຣະສມນະໂຄດົມມີຣິທທານຸພາພມາກ ເຮັດຢ່າງໃດ ພວກເຮົາຈຶ່ງຈະທຳລາຍສົງຊ໌ ທຳລາຍຈັກຣຂອງພຣະສມນະໂຄດົມໄດ້ລະ"

## ວັຕຖຸ ໕ ປະການ

ພຣະເທວທັຕກ່າວວ່າ "ມາເຖີດທ່ານທັງຫລາຍ ພວກເຮົາຈະເຂົ້າໄປເຝົ້າພຣະສມນະໂຄດົມແລ້ວທູລຂໍວັຕຖຸ ໕ ປະການ ວ່າ 'ພຣະອົງຄ໌ຜູ້ຈະເຣີນ ພຣະຜູ້ມີພຣະພາຄຕຣັສສັຣເສີນຄວາມມັກນ້ອຍ ຄວາມສັນໂດສ ຄວາມຂັດ ເກົາ ຄວາມກຳຈັດ ອາການໜ້າເຫລື້ອມໃສ ການບໍ່ສະສົມ ການປາຣົພຄວາມພຽນ ໂດຍປະການຕ່າງໆ ວັຕຖຸ ໕ ປະການເຫລົ່ານີ້ກໍເປັນໄປເພື່ອຄວາມມັກນ້ອຍຄວາມສັນໂດສ ຄວາມຂັດເກົາ ຄວາມກຳຈັດ ອາການໜ້າເຫລື້ອມໃສ ການບໍ່ສະສົມ ການປາຣົພຄວາມພຽນ ໂດຍປະການຕ່າງໆ ຂ້າພຣະພຸທທເຈົ້າຂໍປະທານວໂອກາສ ດັ່ງນີ້

໑. ພິກສຸທັງຫລາຍຄວຣຢູ່ປ່າຕລອດຊີວິຕ ພິກສຸຮູບໃດເຂົ້າບ້ານ ພິກສຸຮູບນັ້ນມີໂທສ

໒. ພິກສຸທັງຫລາຍຄວຣທຽວບິນທບາຕຕລອດຊີວິຕ ພິກສຸຮູບໃດຍິນດີກິຈນິມົນຕ໌ ພິກສຸຮູບນັ້ນມີໂທສ

໓. ພິກສຸທັງຫລາຍຄວຣຖືຜ້າບັງສຸກຸລຕລອດຊີວິຕ ພິກສຸຮູບໃດຍິນດີຜ້າຄຫບໍດີ ພິກສຸຮູບນັ້ນມີໂທສ

໔. ພິກສຸທັງຫລາຍຄວຣຢູ່ໂຄນໄມ້ຕລອດຊີວິຕ ພິກສຸຮູບໃດອາສັຍທີ່ມຸງທີ່ບັງ ພິກສຸຮູບນັ້ນມີໂທສ

໕. ພິກສຸທັງຫລາຍບໍ່ຄວຣສັນປາແລະຊີ້ນຕລອດຊີວິຕ ພິກສຸຮູບໃດສັນປາແລະຊີ້ນ ພິກສຸຮູບນັ້ນມີໂທສ'

ພຣະສມນະໂຄດົມຈະບໍ່ຊົງອນຸຍາຕວັຕຖຸ ໕ ປະການນີ້ແນ່ນອນ ພວກເຮົາຈັກໃຊ້ວັຕຖຸ ໕ ປະການນີ້ຊັກຊວນໃຫ້ປະຊາຊົນເຊື່ອຖື" ທ່ານເຫລົ່ານັ້ນປຶກສາກັນວ່າ "ພວກເຮົາສາມາດທີ່ຈະໃຊ້ວັຕຖຸ ໕ ປະ

ການເຫລົ່ານັ້ນ ທຳລາຍ ສົງຊ໌ ທຳລາຍຈັກຂອງພຣະສມນະໂຄດົມໄດ້ ເພາະຍັງມີພວກມນຸສຍ໌ທີ່ເຫລື້ອມໃສໃນການປະຕິບັດປອນໆ" ຄັ້ງນັ້ນ ພຣະເທວທັດພ້ອມດ້ວຍບໍຣິສັດໄດ້ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຄັນເຖິງແລ້ວຈຶ່ງຖວາຍບັງຄົມແລ້ວນັ່ງລົງ ນະ ທີ່ສົມຄວນ ຂາບທູລວ່າ "ພຣະອົງຄ໌ຜູ້ຈະເຣີນ ພຣະຜູ້ມີພຣະພາຄຕຣັສ ສັຣເສີນຄວາມມັກນ້ອຍ ຄວາມສັນໂດສ ຄວາມຂັດເກົາ ຄວາມກຳຈັດອາການຫນ້າເຫລື້ອມໃສ ການບໍ່ສະສົມ ການປາຣົພ ຄວາມພຽນ ໂດຍປະການຕ່າງໆ ວັຕຖຸ ໕ ປະການເຫລົ່ານີ້ກໍເປັນໄປເພື່ອຄວາມມັກນ້ອຍ ຄວາມສັນໂດສ ຄວາມຂັດເກົາ ຄວາມກຳຈັດອາການຫນ້າເຫລື້ອມໃສ ການບໍ່ສະສົມ ການປາຣົພຄວາມພຽນ ໂດຍປະການຕ່າງໆ ຂ້າພຣະພຸທທເຈົ້າຂໍປະທານອໂຣກາສ ດັ່ງນີ້

໑. ພິກສຸທັງຫລາຍຄວຣຢູ່ປ່າຕລອດຊີວິຕ ພິກສຸຮູບໃດເຂົ້າບ້ານ ພິກສຸຮູບນັ້ນມີໂທສ

໒. ພິກສຸທັງຫລາຍຄວຣທຽວບິນທບາຕຕລອດຊີວິຕ ພິກສຸຮູບໃດຍິນດີກິຈນິມົນຕ໌ ພິກສຸຮູບນັ້ນມີໂທສ

໓. ພິກສຸທັງຫລາຍຄວຣຖືຜ້າບັງສຸກຸລຕລອດຊີວິຕ ພິກສຸຮູບໃດຍິນດີຜ້າຄຫບໍດີ ພິກສຸຮູບນັ້ນມີໂທສ

໔. ພິກສຸທັງຫລາຍຄວຣຢູ່ເຫງົ້າໄມ້ຕລອດຊີວິຕ ພິກສຸຮູບໃດອາສັຍທີ່ມຸງທີ່ບັງ ພິກສຸຮູບນັ້ນມີໂທສ

໕. ພິກສຸທັງຫລາຍບໍ່ຄວຣສັນປາແລະຊີ້ນຕລອດຊີວິຕ ພິກສຸຮູບໃດສັນປາແລະຊີ້ນ ພິກສຸຮູບນັ້ນມີໂທສ"

ພຣະຜູ້ມີພຣະພາຄຕຣັສຫ້າມວ່າ "ຢ່າເລີຍເທວທັຕ ພິກສຸຮູບໃດປຣາຖນາກໍຈົ່ງຢູ່ປ່າເຖີດ ພິກສຸຮູບໃດປຣາຖນາກໍຈົ່ງຢູ່ໃນລະແວກບ້ານເຖີດ ພິກສຸຮູບໃດປຣາຖນາກໍຈົ່ງທຽວບິນທບາຕເຖີດ ພິກສຸຮູບໃດປຣາຖນາກໍຈົ່ງຍິນດີກິຈນິມົນຕ໌ເຖີດ ພິກສຸຮູບໃດປຣາຖນາກໍຈົ່ງຖືຜ້າບັງສຸກຸລເຖີດ ພິກສຸຮູບໃດປຣາຖນາກໍຈົ່ງຍິນດີຜ້າຄຫບໍດີເຖີດ ເຮົາອນຸຍາຕຖືເສນາສນະຕາມເຫງົ້າໄມ້ ໗ ເດືອນເທົ່ານັ້ນ ເຮົາອນຸຍາຕປາແລະຊີ້ນທີ່ບໍຣິສຸດທ໌ດ້ວຍອາການ
໓ ຢ່າງ ຄື (໑) ບໍ່ໄດ້ເຫັນ (໒) ບໍ່ໄດ້ຍິນ (໓) ບໍ່ໄດ້ນຶກສົງສັຍ"

ຄັ້ງນັ້ນ ພຣະເທວທັຕເບີກບານດີໃຈວ່າ ພຣະຜູ້ມີພຣະພາຄບໍ່ຊົງອນຸຍາຕວັຕຖຸ ໕ ປະການເຫລົ່ານີ້ ພ້ອມກັບບໍຣິສັດ ລຸກຂຶ້ນຈາກອາສນະ ຖວາຍບັງຄົມພຣະຜູ້ມີພຣະພາຄ ທຳປຣະທັກສິນ(ວຽນໄປທາງຂວາ) ແລ້ວຈາກໄປ

[໔໑໐] ສມັຍນັ້ນ ພຣະເທວທັຕພ້ອມກັບບໍຣິສັດເຂົ້າໄປຍັງກຸງຣາຊຄຶຫ໌ ໃຊ້ວັຕຖຸ ໕ ປະການ ຊັກຊວນໃຫ້ປະຊາຊົນເຊື່ອຖື ດ້ວຍກ່າວວ່າ "ພວກເຮົາເຂົ້າໄປເຝົ້າພຣະສມນະໂຄດົມທູລຂໍວັຕຖຸ ໕ ປະການວ່າ 'ພຣະອົງຄ໌ຜູ້ຈະເຣີນ ພຣະຜູ້ມີພຣະພາຄຕຣັສສັຣເສີນຄວາມມັກນ້ອຍ ຄວາມສັນໂດສ ຄວາມຂັດເກົາ ຄວາມກຳຈັດ ອາການຫນ້າເຫລື້ອມໃສ ການບໍ່ສະສົມ ການປາຣົພຄວາມພຽນ ໂດຍປະການຕ່າງໆ ວັຕຖຸ ໕ ປະການເຫລົ່ານີ້ກໍເປັນໄປເພື່ອຄວາມມັກນ້ອຍ ຄວາມສັນໂດສ ຄວາມຂັດເກົາ ຄວາມກຳຈັດ ອາການຫນ້າເຫລື້ອມໃສ ການບໍ່ສະສົມ
ການປາຣົພຄວາມພຽນ ໂດຍປະການຕ່າງໆ ຂ້າພຣະພຸທທເຈົ້າຂໍປະທານອໂອກາສ ດັ່ງນີ້

໑. ພິກສຸທັງຫລາຍຄວຣຢູ່ປ່າຕລອດຊີວິຕ ພິກສຸຮູບໃດເຂົ້າບ້ານ ພິກສຸຮູບນັ້ນມີໂທສ
໒. ພິກສຸທັງຫລາຍຄວຣທຽວບິນທບາຕຕລອດຊີວິຕ ພິກສຸຮູບໃດຍິນດີກິຈນິມົນຕ໌ ພິກສຸຮູບນັ້ນມີໂທສ
໓. ພິກສຸທັງຫລາຍຄວຣຖືຜ້າບັງສຸກຸລຕລອດຊີວິຕ ພິກສຸຮູບໃດຍິນດີຜ້າຄຫບໍດີ ພິກສຸຮູບນັ້ນມີໂທສ
໔. ພິກສຸທັງຫລາຍຄວຣຢູ່ເຫງົ້າໄມ້ຕລອດຊີວິຕ ພິກສຸຮູບໃດອາສັຍທີ່ມຸງທີ່ບັງ ພິກສຸຮູບນັ້ນມີໂທສ
໕. ພິກສຸທັງຫລາຍບໍ່ຄວຣສັນປາແລະຊີ້ນຕລອດຊີວິຕ ພິກສຸຮູບໃດສັນປາແລະຊີ້ນ ພິກສຸຮູບນັ້ນມີໂທສ'

ແຕ່ພຣະສມນະໂຄດົມບໍ່ຊົງອນຸຍາຕວັຕຖຸ ໕ ປະການເຫລົ່ານັ້ນ ພວກເຮົາຈິ່ງສມາທານປະພຶດຕາມວັຕຖຸ ໕ ປະການເຫລົ່ານີ້ເຖີດ"

ບັນດາປະຊາຊົນເຫລົ່ານັ້ນ ພວກທີ່ບໍ່ສັດທາ ບໍ່ເຫລື້ອມໃສ ມີຄວາມຮູ້ບໍ່ດີ ກ່າວວ່າ "ພຣະສມນະເຊື້ອສາຍສັກຍບຸຕຣເຫລົ່ານີ້ ປະພຶດກຳຈັດກິເລສ ປະພຶດເຄັ່ງຄັດ ສ່ວນພຣະສມນະໂຄດົມມັກມາກດຳຣິເພື່ອຄວາມມັກມາກ" ສ່ວນພວກມີສັດທາ ເຫລື້ອມໃສ ເປັນບັນທິຕ ສລຽວສລາດ ມີຄວາມຮູ້ດີ ກໍຕຳຫນິປະນາມ ໂພນທະ ນາ ວ່າ "ຈັ່ງໃດພຣະເທວທັຕຈຶ່ງພຽນພຍາຍາມເພື່ອທຳລາຍສົງຄ໌ ເພື່ອທຳລາຍຈັກຣຂອງພຣະຜູ້ມີພຣະພາຄລະ" ພິກສຸທັງຫລາຍໄດ້ຍິນປະຊາຊົນຕຳຫນິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ຯລຯ ຈຶ່ງພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະເທວທັຕຈຶ່ງພຽນພຍາຍາມເພື່ອທຳລາຍສົງຄ໌ ເພື່ອທຳລາຍຈັກຣລະ" ຄັນພິກສຸທັງຫລາຍຕຳຫນິພຣະເທວທັຕໂດຍປະການຕ່າງໆ ແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັຕສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຊ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພຣະເທວທັຕວ່າ "ເທວທັຕ ຊາບວ່າທ່ານພຽນພຍາຍາມເພື່ອທຳລາຍສົງຊ໌ ເພື່ອທຳລາຍຈັກຣ ແມ່ນແທ້ບໍ່" ພຣະເທວທັຕທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ໂມຂບຸຣຸສ ກາຣກະທຳຂອງທ່ານນັ້ນບໍ່ສົມຄວຣ ຯລຯ ໂມຂບຸຣຸສຈັ່ງໃດທ່ານຈຶ່ງພຽນພຍາຍາມເພື່ອທຳລາຍສົງຊ໌ ເພື່ອທຳລາຍຈັກຣລະ ໂມຂບຸຣຸສ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງ ດັ່ງນີ້

## ພຣະບັນຍັຕ

[໔໑໑] ກໍ ພິກສຸໃດພຽນພຍາຍາມເພື່ອທຳລາຍສົງຊ໌ຜູ້ພ້ອມພຽງ ຫລືຖືຍົກຍ້ອງຢືນຍັນອທິກຣນ໌(ບັນຫາຂອງສົງຊ໌)ອັນເປັນເຫຕຸເຮັດໃຫ້ແຕກແຍກກັນ ພິກສຸນັ້ນອັນພິກສຸທັງຫລາຍເພິງວ່າກ່າວຕັກເຕືອນຢ່າງນີ້ວ່າ "ທ່ານຢ່າພຽນພຍາຍາມເພື່ອທຳລາຍສົງຊ໌ຜູ້ພ້ອມພຽງ ຫລືຖືຍົກຍ້ອງຢືນຍັນອທິກຣນ໌(ບັນຫາຂອງສົງຊ໌)ອັນເປັນເຫຕຸເຮັດໃຫ້ແຕກແຍກກັນ ທ່ານຈົ່ງພ້ອມພຽງກັບສົງຊ໌ ເພາະສົງຊ໌ຜູ້ພ້ອມພຽງ ປອງດອງ ບໍ່ວິວາທ ມີອຸທເທສດຽວກັນ ຍ່ອມຢູ່ຜາສຸກ" ແລະພິກສຸນັ້ນອັນພິກສຸທັງຫລາຍວ່າກ່າວຕັກເຕືອນຢ່າງນີ້ ຍັງຍົກຍ້ອງຢູ່ ຢ່າງນັ້ນ ພິກສຸນັ້ນອັນພິກສຸທັງຫລາຍເພິງສວດສມນຸພາສນ໌ຈົນຄົບ ໓ ຄັ້ງເພື່ອໃຫ້ສລະເຣື້ອງນັ້ນ ຖ້າທ່ານກຳລັງຖືກສວດສມນຸພາສນ໌ກວ່າຈະຄົບ ໓ ຄັ້ງ ສລະເຣື້ອງນັ້ນໄດ້ ນັ້ນເປັນກາຣດີ ຖ້າທ່ານບໍ່ສລະ ເປັນສັງຂາທິເສສ

## ເຣື້ອງພຣະເທວທັຕ ຈົບ

## ສິກຂາບົທວິພັງຄ໌

[໔໑໒] ຄຳວ່າ ກໍ...ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ...ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ທີ່ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ຊື່ວ່າ ຜູ້ພ້ອມພຽງ ຄື ສົງຊ໌ຜູ້ມີສັງວາສສເມີກັນ ຢູ່ໃນສີມາດຽວກັນ

ຄຳວ່າ ພຽນພຍາຍາມເພື່ອທຳລາຍ ຄື ແສວງຫາພວກ ຮອມກັນເປັນຫມູ່ ໂດຍມຸ່ງຫມາຍວ່າເຮັດຢ່າງໃດ ພິກສຸເຫລົ່ານີ້ຈະແຕກກັນແຍກກັນ ແບ່ງເປັນພວກ

ຄໍາວ່າ ຫລື...ອທິກຣນ໌(ບັນຫາຂອງສົງຂ໌)ອັນເປັນເຫຕຸເຮັດໃຫ້ແຕກແຍກກັນ ໄດ້ແກ່ ເຣື້ອງເຮັດໃຫ້ແຕກກັນ ໑໘ ຢ່າງ

ຄໍາວ່າ ຖື ຄື ຍຶດເອົາ

ຄໍາວ່າ ຍົກຍ້ອງ ຄື ສະແດງ

ຄໍາວ່າ ຍືນຍັນ ຄື ບໍ່ກັບຄໍາ

ຄໍາວ່າ ພິກສຸນັ້ນ ໄດ້ແກ່ ພິກສຸຜູ້ທໍາລາຍສົງຂ໌

ຄໍາວ່າ ອັນພິກສຸທັງຫລາຍ ໄດ້ແກ່ ອັນພິກສຸເຫລົ່າອື່ນ

ອທິບາຍວ່າ ພິກສຸຜູ້ໄດ້ເຫັນ ຜູ້ໄດ້ຍິນເພິງວ່າກ່າວຕັກເຕືອນພິກສຸຜູ້ພຽນພຍາຍາມເພື່ອທໍາລາຍສົງຂ໌ນັ້ນວ່າ "ທ່ານຢ່າພຽນພຍາຍາມເພື່ອທໍາລາຍສົງຂ໌ຜູ້ພ້ອມພຽງ ຫລືຢ່າຖືຍົກຍ້ອງຍືນຍັນອທິກຣນ໌(ບັນຫາຂອງສົງຂ໌)ອັນເປັນເຫຕຸເຮັດໃຫ້ແຕກແຍກກັນ ທ່ານຈົ່ງພ້ອມພຽງກັບສົງຂ໌ ເພາະສົງຂ໌ຜູ້ພ້ອມພຽງ ປອງດອງ ບໍ່ວິວາທ ມີອຸທເທສດຽວກັນ ຍ່ອມຢູ່ຜາສຸກ" ເພິງວ່າກ່າວຕັກເຕືອນທ່ານແມ່ນຄັ້ງທີ ໒ ເພິງວ່າກ່າວຕັກເຕືອນທ່ານແມ່ນຄັ້ງທີ ໓ ຖ້າທ່ານສລະໄດ້ ນັ້ນເປັນກາຣດີ ຖ້າທ່ານບໍ່ສລະ ຕ້ອງອາບັຕິທຸກກຕ ພິກສຸທັງຫລາຍຊາບແລ້ວບໍ່ວ່າກ່າວຕັກເຕືອນ ຕ້ອງອາບັຕິທຸກກຕ ພິກສຸນັ້ນອັນພິກສຸທັງຫລາຍເພິງຄຸມຕົວມາສູ່ທ່າມກາງສົງຂ໌ ວ່າກ່າວຕັກເຕືອນວ່າ "ທ່ານຢ່າພຽນພຍາຍາມເພື່ອທໍາລາຍສົງຂ໌ຜູ້ພ້ອມພຽງ ຫລືຢ່າຖືຍົກຍ້ອງຍືນຍັນອທິກຣນ໌(ບັນຫາຂອງສົງຂ໌)ອັນເປັນເຫຕຸເຮັດໃຫ້ແຕກແຍກກັນ ທ່ານຈົ່ງພ້ອມພຽງກັບສົງຂ໌ ເພາະສົງຂ໌ຜູ້ພ້ອມພຽງ ປອງດອງ ບໍ່ວິວາທ ມີອຸທເທສດຽວກັນ ຍ່ອມຢູ່ຜາສຸກ" ເພິງວ່າກ່າວຕັກເຕືອນທ່ານແມ່ນຄັ້ງທີ ໒ ເພິງວ່າກ່າວຕັກເຕືອນທ່ານແມ່ນຄັ້ງທີ ໓ ຖ້າທ່ານສລະໄດ້ ນັ້ນເປັນກາຣດີ ຖ້າທ່ານບໍ່ສລະ ຕ້ອງອາບັຕິທຸກກຕ ສົງຂ໌ເພິງສວດສມນຸພາສນ໌ທ່ານ

## ວິທີສວດສມນຸພາສນ໌ ແລະກັມວາຈາສວດສມນຸພາສນ໌

ພິກສຸທັງຫລາຍເພິງສວດສມນຸພາສນ໌ພິກສຸນັ້ນຢ່າງນີ້ ຄື ພິກສຸຜູ້ສລາດສາມາດເພິງປະກາດໃຫ້ສົງຂ໌ຊາບວ່າ

[໔໑໓] ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ພິກສຸຊື່ນີ້ພຽນພຍາຍາມເພື່ອທໍາລາຍສົງຂ໌ຜູ້ພ້ອມພຽງ ພິກສຸນັ້ນບໍ່ຍອມສລະເຣື້ອງນັ້ນ ຖ້າສົງຂ໌ພ້ອມແລ້ວກໍເພິງສວດສມນຸພາສນ໌ພິກສຸຊື່ນີ້ເພື່ອໃຫ້ສລະເຣື້ອງນັ້ນ ນີ້ເປັນຍັຕຕິ ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ພິກສຸຊື່ນີ້ພຽນພຍາຍາມເພື່ອທໍາລາຍສົງຂ໌ຜູ້ພ້ອມພຽງ ພິກສຸນັ້ນບໍ່ສລະເຣື້ອງນັ້ນ ສົງຂ໌ສວດສມນຸພາສນ໌ທ່ານເພື່ອໃຫ້ສລະເຣື້ອງ

ນັ້ນ ທ່ານຮູບໃດເຫັນດ້ວຍກັບການສວດສມນຸພາສນ໌ພິກສຸຊື່ນີ້ ເພື່ອໃຫ້ສລະເອື້ອງນັ້ນເສັຽ ທ່ານຮູບນັ້ນເພິງນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນເພິງທັກທ້ວງ ແມ່ນຄັ້ງທີ ໔ ຯລຯ ແມ່ນຄັ້ງທີ ໖ ຂ້າພະເຈົ້າກໍກ່າວຄວາມນີ້ວ່າ ທ່ານຜູ້ຈະເຣີນ ຂໍສົງຊ໌ຈົ່ງຟັງຂ້າພະເຈົ້າ ພິກສຸຊື່ນີ້ພຽນພຍາຍາມເພື່ອທຳລາຍສົງຊ໌ຜູ້ພ້ອມພຽງ ພິກສຸນັ້ນບໍ່ສລະເອື້ອງນັ້ນ ສົງຊ໌ສວດສມນຸພາສນ໌ທ່ານເພື່ອໃຫ້ສລະເອື້ອງນັ້ນ ທ່ານຮູບໃດເຫັນດ້ວຍກັບການສວດສມນຸພາສນ໌ພິກສຸຊື່ນີ້ເພື່ອໃຫ້ສລະ
ເອື້ອງນັ້ນເສັຽ ທ່ານຮູບນັ້ນເພິງນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນເພິງທັກທ້ວງ ພິກສຸຊື່ນີ້ ສົງຊ໌ສວດສມນຸພາສນ໌ເພື່ອໃຫ້ສລະເອື້ອງນັ້ນແລ້ວ ສົງຊ໌ເຫັນດ້ວຍ ເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືຄວາມນິ່ງເປັນມຕິຢ່າງນີ້

[໔໑໔] ຈົບຍັຕຕິ ຕ້ອງອາບັຕິທຸກກຕ ຈົບກັມວາຈາ ໒ ຄັ້ງ ຕ້ອງອາບັຕິຖຸລລັຈຈັຍ ຈົບກັມວາຈາຄັ້ງສຸດທ້າຍ ຕ້ອງອາບັຕິສັງຊາທິເສສ ເມື່ອທ່ານຕ້ອງອາບັຕິສັງຊາທິເສສ ອາບັຕິທຸກກຕ(ທີ່ຕ້ອງ) ເພາະຍັຕຕິ ອາບັຕິຖຸລລັຈຈັຍ(ທີ່ຕ້ອງ) ເພາະກັມວາຈາ ໒ ຄັ້ງ ຍ່ອມຣະງັບໄປ
ຄຳວ່າ ເປັນສັງຊາທິເສສ ຄວາມວ່າ ສຳລັບອາບັຕິນັ້ນ ສົງຊ໌ເທົ່ານັ້ນໃຫ້ປຣິວາສ ຯລຯ ເພາະເຫດຸນັ້ນ ພຣະຜູ້ມີພຣະພາຄຈຶ່ງຕຣັສຮຽກວ່າ "ເປັນສັງຊາທິເສສ"

ບົທພາຊນີຍ໌

[໔໑໕] ກັມທີ່ທຳຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳຖືກຕ້ອງ ບໍ່ສລະ ຕ້ອງອາບັຕິສັງຊາທິເສສ
ກັມທີ່ທຳຖືກຕ້ອງ ພິກສຸບໍ່ແນ່ໃຈ ບໍ່ສລະ ຕ້ອງອາບັຕິສັງຊາທິເສສ
ກັມທີ່ທຳຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳບໍ່ຖືກຕ້ອງ ບໍ່ສລະ ຕ້ອງອາບັຕິສັງຊາທິເສສ
ກັມທີ່ທຳບໍ່ຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳຖືກຕ້ອງ ຕ້ອງອາບັຕິທຸກກຕ
ກັມທີ່ທຳບໍ່ຖືກຕ້ອງ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ
ກັມທີ່ທຳບໍ່ຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳບໍ່ຖືກຕ້ອງ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໔໑໖] ໑. ພິກສຸຜູ້ຍັງບໍ່ຖືກສວດສມນຸພາສນ໌
໒. ພິກສຸຜູ້ຍອມສລະ

໖. ພິກສຸວິກົລຈິຕ
໔. ພິກສຸຜູ້ມີຈິຕປັ່ນປ່ວງ
໕. ພິກສຸຜູ້ກະວົນກະວາຍເພາະເວທນາ
໓. ພິກສຸຕົ້ນບັນຍັຕ

ສັງຂເພທສິກຂາບົທທີ ໑໐ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ສັງຂາທິເສສກັນຫ໌] ໑໑. ສັງຂເພທານຸວັຕຕກສິກຂາບົທ

ນິທານວັຕຖຸ

໑໑. ສັງຂເພທານຸວັຕຕກສິກຂາບົທ

ວ່າດ້ວຍພິກສຸຜູ້ປະພຶດຕາມ ກ່າວສນັບສນຸນພິກສຸຜູ້ທຳລາຍສົງຂ໌

ເຣື້ອງພຣະໂກກາລິກະແລະພວກປະພຶດຕາມ ກ່າວສນັບສນຸນພຣະເທວທັຕ

[໔໑໗] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເວລຸວັນ ສຖານທີ່ໃຫ້ເຫຍື່ອກະແຕ ເຂຕກຸງຣາຊຄຶຫ໌ ຄັ້ງນັ້ນ ພຣະເທວທັຕພຽນພຍາຍາມເພື່ອທຳລາຍສົງຂ໌ເພື່ອທຳລາຍຈັກຣ ພິກສຸທັງຫລາຍກ່າວກັນ ຢ່າງນີ້ວ່າ "ພຣະເທວທັຕກ່າວສິ່ງທີ່ບໍ່ເປັນທັມ ກ່າວສິ່ງທີ່ບໍ່ເປັນວິນັຍ ຈັ່ງໃດພຣະເທວທັຕຈຶ່ງພຽນພຍາຍາມເພື່ອທຳລາຍສົງຂ໌ ເພື່ອທຳລາຍຈັກຣລະ" ເມື່ອພິກສຸທັງຫລາຍກ່າວຢ່າງນີ້ ພຣະໂກກາລິກະ ພຣະກຕໂມຣກຕິສສກະ ພຣະຂັນທເທວີບຸຕຣ ແລະພຣະສມຸທທທັຕ ໄດ້ກ່າວກັບພິກສຸເຫລົ່ານັ້ນດັ່ງນີ້ວ່າ "ທ່ານທັງຫລາຍ ພວກທ່ານຢ່າກ່າວຢ່າງນັ້ນ ພຣະເທວທັຕກ່າວສິ່ງທີ່ເປັນທັມ ກ່າວສິ່ງທີ່ເປັນວິນັຍ ທ່ານກ່າວຕາມຄວາມພໍໃຈແລະຄວາມຊອບໃຈຂອງພວກເຮົາ ທ່ານຊາບຄວາມພໍໃຈແລະຄວາມຊອບໃຈຂອງພວກເຮົາຈຶ່ງກ່າວ ພວກເຮົາເຫັນດ້ວຍກັບຄຳຂອງທ່ານ" ບັນດາພິກສຸຜູ້ມັກນ້ອຍ ຯລຯ ຈຶ່ງພາກັນຕຳໜິປະນາມ ໂພນທະນາວ່າ "ຈັ່ງໃດ ພິກສຸທັງຫລາຍຈຶ່ງປະພຶດຕາມ ກ່າວສນັບສນຸນພຣະເທວທັຕຜູ້ພຽນພຍາຍາມເພື່ອທຳລາຍສົງຂ໌ລະ" ຄັນພິກສຸເຫລົ່ານັ້ນຕຳໜິພິກສຸພວກພຣະໂກກາລິກະເຫລົ່ານັ້ນໂດຍປະກາຣຕ່າງໆ ແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ຊາບວ່າ ມີພິກສຸປະພຶດຕາມ ກ່າວສນັບສນຸນເທວທັຕຜູ້ພຽນພຍາຍາມເພື່ອທຳລາຍສົງຂ໌ ແມ່ນແທ້ບໍ່" ພິກສຸທັງຫລາຍຂາບທູລວ່າ"ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ພິກສຸທັງຫລາຍ ການກະທຳຂອງໂມຂບຸຣຸສເຫລົ່ານັ້ນບໍ່ສົມຄວຣ ຯລຯ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງ ດັ່ງນີ້

ພຣະບັນຍັຕ

[໔໑໗] ກໍ ພິກສຸມີຈຳນວນ ໑ ຮູບ ໔ ຮູບ ຫລື ໓ ຮູບປະພຶດຕາມ ກ່າວສນັບສນຸນພິກສຸນັ້ນພວກທ່ານກ່າວຢ່າງນີ້ວ່າ "ພວກທ່ານຢ່າວ່າກ່າວຫຍັງພິກສຸນັ້ນ ພິກສຸນັ້ນກ່າວສິ່ງທີ່ເປັນທັມ ພິກສຸນັ້ນກ່າວສິ່ງທີ່ເປັນວິນັຍ ພິກສຸນັ້ນກ່າວຕາມຄວາມພໍໃຈແລະຄວາມຊອບໃຈຂອງພວກເຮົາ ທ່ານຊາບຄວາມພໍໃຈແລະຄວາມຊອບໃຈຂອງ
ພວກເຮົາຈຶ່ງກ່າວ ພວກເຮົາເຫັນດ້ວຍກັບຄຳນັ້ນ" ພິກສຸເຫລົ່ານັ້ນອັນພິກສຸທັງຫລາຍເພິງວ່າກ່າວຕັກເຕືອນຢ່າງນີ້ວ່າ "ພວກທ່ານຢ່າເວົ້າຢ່າງນັ້ນ ພິກສຸນັ້ນບໍ່ແມ່ນຜູ້ກ່າວສິ່ງທີ່ເປັນທັມ ພິກສຸນັ້ນບໍ່ແມ່ນຜູ້ກ່າວສິ່ງທີ່ເປັນວິນັຍ ພວກທ່ານຢ່າຊອບໃຈການທຳລາຍສົງຂ໌ ພວກທ່ານຈົ່ງພ້ອມພຽງກັບສົງຂ໌ ເພາະສົງຂ໌ຜູ້ພ້ອມພຽງ ປອງດອງ ບໍ່ວິວາທ ມີອຸທເທສດຽວກັນ ຍ່ອມຢູ່ຜາສຸກ" ພິກສຸເຫລົ່ານັ້ນອັນພວກພິກສຸວ່າກ່າວຕັກເຕືອນຢູ່ຢ່າງນີ້ ຍັງຍົກຍ້ອງຢູ່ຢ່າງນັ້ນ ພິກສຸເຫລົ່ານັ້ນອັນພິກສຸທັງຫລາຍເພິງສວດສມນຸພາສນ໌ຈນຄົບ ໓ ຄັ້ງເພື່ອໃຫ້ສລະເຣື້ອງນັ້ນ ຖ້າພວກທ່ານກຳລັງຖືກສວດສມນຸພາສນ໌ກວ່າຈະຄົບ ໓ ຄັ້ງ ສລະເຣື້ອງນັ້ນໄດ້ ນັ້ນເປັນການດີ ຖ້າພວກທ່ານບໍ່ສລະ ເປັນສັງຂາທິເສສ

ເຣື້ອງພຣະໂກກາລິກະແລະພວກປະພຶດຕາມ ກ່າວສນັບສນຸນພຣະເທວທັຕ ຈົບ
ສິກຂາບົທວິພັງຄ໌

[໔໑໘] ຄຳວ່າ ກໍ...ພິກສຸນັ້ນ ຄື ພິກສຸຜູ້ທຳລາຍສົງຂ໌ນັ້ນ
ຄຳວ່າ ພິກສຸ ຄື ມີພິກສຸເຫລົ່າອື່ນ

ຄຳວ່າ ປະພຶດຕາມ ຄວາມວ່າ ພິກສຸຜູ້ທຳລາຍສົງຊ໌ເຫັນຢ່າງໃດ ພໍໃຈຢ່າງໃດແລະຊອບໃຈຢ່າງໃດ ແມ່ນພິກສຸເຫລົ່ານັ້ນກໍເຫັນຢ່າງນັ້ນ ພໍໃຈຢ່າງນັ້ນແລະຊອບໃຈຢ່າງນັ້ນ

ຄຳວ່າ ກ່າວສນັບສນຸນ ຄື ດຳຣົງຢູ່ໃນພວກ ໃນຝ່າຍຂອງພິກສຸຜູ້ທຳລາຍສົງຊ໌ນັ້ນ

ຄຳວ່າ ໑ ຮູບ ໒ ຮູບ ຫລື ໓ ຮູບ ຄວາມວ່າ ມີພິກສຸ ໑ ຮູບ ໒ ຮູບ ຫລື ໓ ຮູບ ພິກສຸເຫລົ່ານັ້ນກ່າວ ຢ່າງນີ້ວ່າ "ພວກທ່ານຢ່າວ່າກ່າວຫຍັງພິກສຸນັ້ນ ພິກສຸນັ້ນກ່າວສິ່ງທີ່ເປັນທັມ ພິກສຸນັ້ນກ່າວສິ່ງທີ່ເປັນວິນັຍ ພິກສຸນັ້ນກ່າວຕາມຄວາມພໍໃຈແລະຊອບໃຈຂອງພວກເຮົາ ທ່ານຊາບຄວາມພໍໃຈແລະຄວາມຊອບໃຈຂອງພວກເຮົາຈຶ່ງກ່າວ ພວກເຮົາເຫັນດ້ວຍກັບຄຳນັ້ນ"

ຄຳວ່າ ພິກສຸເຫລົ່ານັ້ນ ໄດ້ແກ່ ພິກສຸຜູ້ປະພຶດຕາມເຫລົ່ານັ້ນ

ຄຳວ່າ ອັນພິກສຸທັງຫລາຍ ໄດ້ແກ່ ອັນພິກສຸເຫລົ່າອື່ນ

ອທິບາຍວ່າ ພິກສຸຜູ້ໄດ້ເຫັນ ຜູ້ໄດ້ຍິນເພິງວ່າກ່າວຕັກເຕືອນພິກສຸຜູ້ປະພຶດຕາມເຫລົ່ານັ້ນວ່າ "ພວກທ່ານຢ່າ ກ່າວຢ່າງນັ້ນ ພິກສຸນັ້ນບໍ່ແມ່ນຜູ້ກ່າວສິ່ງທີ່ເປັນທັມ ພິກສຸນັ້ນບໍ່ແມ່ນຜູ້ກ່າວສິ່ງທີ່ເປັນວິນັຍ ພວກທ່ານຢ່າຊອບໃຈການທຳລາຍສົງຊ໌ ພວກທ່ານຈົ່ງພ້ອມພຽງກັບສົງຊ໌ ເພາະສົງຊ໌ຜູ້ພ້ອມພຽງ ປອງດອງ ບໍ່ວິວາທ ມີອຸທ ເທສດຽວກັນ ຍ່ອມຢູ່ຜາສຸກ" ເພິງວ່າກ່າວຕັກເຕືອນພວກທ່ານແມ່ນຄັ້ງທີ ໒ ເພິງວ່າກ່າວຕັກເຕືອນພວກ

ທ່ານແມ່ນຄັ້ງທີ ໓ ຖ້າພິກສຸເຫລົ່ານັ້ນສລະໄດ້ ນັ້ນເປັນການດີ ຖ້າບໍ່ສລະ ຕ້ອງອາບັຕິທຸກກຕ ພິກສຸທັງຫລາຍຊາບແລ້ວບໍ່ວ່າກ່າວຕັກເຕືອນ ຕ້ອງອາບັຕິທຸກກຕ ພິກສຸເຫລົ່ານັ້ນອັນພິກສຸທັງຫລາຍເພິງຄຸມຕົວມາສູ່ທ່າມກາງສົງຊ໌ ວ່າກ່າວຕັກເຕືອນວ່າ "ພວກທ່ານຢ່າກ່າວຢ່າງນັ້ນ ພິກສຸນັ້ນບໍ່ແມ່ນຜູ້ກ່າວສິ່ງທີ່ເປັນທັມ ພິກສຸນັ້ນບໍ່ແມ່ນຜູ້ກ່າວສິ່ງທີ່ເປັນວິນັຍ ພວກທ່ານຢ່າຊອບໃຈການທຳລາຍສົງຊ໌ ພວກທ່ານຈົ່ງພ້ອມພຽງກັບສົງຊ໌ ເພາະສົງຊ໌ຜູ້ພ້ອມພຽງ ປອງດອງ ບໍ່ວິວາທ ມີອຸທເທສດຽວກັນ ຍ່ອມຢູ່ຜາສຸກ" ເພິງວ່າກ່າວຕັກເຕືອນພວກທ່ານແມ່ນຄັ້ງທີ ໒ ເພິງວ່າກ່າວຕັກເຕືອນພວກທ່ານແມ່ນຄັ້ງທີ ໓ ຖ້າພິກສຸເຫລົ່ານັ້ນສລະໄດ້ນັ້ນເປັນການດີ ຖ້າບໍ່ສລະ ຕ້ອງອາບັຕິທຸກກຕ ສົງຊ໌ເພິງສວດສມນຸພາສນ໌ພິກສຸເຫລົ່ານັ້ນ

## ວິທີສວດສມນຸພາສນ໌ ແລະກັມວາຈາສວດສມນຸພາສນ໌

ພິກສຸເຫລົ່ານັ້ນອັນພິກສຸທັງຫລາຍເພິງສວດສມນຸພາສນ໌ຢ່າງນີ້ ຄື ພິກສຸຜູ້ສລາດ ສາມາດເພິງປະກາດໃຫ້ສົງຊ໌ຊາບວ່າ

[໔໒໐] ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ພິກສຸທັງຫລາຍຊື່ນີ້ແລະຊື່ນີ້ປະພຶດຕາມ ກ່າວສ ນັບສນຸນພິກສຸຊື່ນີ້ຜູ້ພຽນພຍາຍາມເພື່ອທຳລາຍສົງຄ໌ ພິກສຸເຫລົ່ານັ້ນຍັງບໍ່ສລະເຣື້ອງນັ້ນ ຖ້າສົງຄ໌ ພ້ອມກັນແລ້ວເພິ່ງ ສວດສມນຸພາສນ໌ ພິກສຸທັງຫລາຍຊື່ນີ້ແລະຊື່ນີ້ ເພື່ອໃຫ້ສລະເຣື້ອງນັ້ນ ນີ້ເປັນ ຍັຕຕິ ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ພິກສຸທັງຫລາຍຊື່ນີ້ແລະຊື່ນີ້ ປະພຶດຕາມກ່າວສນັບສ ນຸນພິກສຸຊື່ນີ້ຜູ້ພຽນພຍາຍາມເພື່ອທຳລາຍສົງຄ໌ ພິກສຸເຫລົ່ານັ້ນຍັງບໍ່ສລະເຣື້ອງນັ້ນ ສົງຄ໌ສວດສມນຸ ພາສນ໌ພິກສຸທັງຫລາຍຊື່ນີ້ແລະຊື່ນີ້ເພື່ອໃຫ້ສລະເຣື້ອງນັ້ນ ທ່ານຮູບໃດເຫັນດ້ວຍກັບການສວດສມ ນຸພາສນ໌ພິກສຸທັງຫລາຍຊື່ນີ້ແລະຊື່ນີ້ເພື່ອໃຫ້ສລະເຣື້ອງນັ້ນ ທ່ານຮູບນັ້ນເພິ່ງນິ່ງ ທ່ານຮູບໃດບໍ່ ເຫັນດ້ວຍ ທ່ານຮູບນັ້ນເພິ່ງທັກທ້ວງແມ່ນຄັ້ງທີ ໒ ຯລຯ ແມ່ນຄັ້ງທີ ໓ ຂ້າພະເຈົ້າກໍກ່າວຄວາມນີ້ ວ່າ ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ພິກສຸທັງຫລາຍຊື່ນີ້ແລະຊື່ນີ້ ປະພຶດ ຕາມ ກ່າວສນັບສ ນຸນພິກສຸຊື່ນີ້ຜູ້ພຽນພຍາຍາມເພື່ອທຳລາຍສົງຄ໌ ພິກສຸເຫລົ່ານັ້ນຍັງບໍ່ສລະເຣື້ອງນັ້ນ ສົງຄ໌ສວດສມນຸ ພາສນ໌ພິກສຸທັງຫລາຍຊື່ນີ້ແລະຊື່ນີ້ເພື່ອໃຫ້ສລະເຣື້ອງນັ້ນ ທ່ານຮູບໃດເຫັນດ້ວຍກັບການສວດສມ ນຸພາສນ໌ພິກສຸທັງຫລາຍຊື່ນີ້ແລະຊື່ນີ້ເພື່ອໃຫ້ສລະເຣື້ອງນັ້ນ ທ່ານຮູບນັ້ນເພິ່ງນິ່ງ ທ່ານຮູບໃດບໍ່ ເຫັນດ້ວຍ ທ່ານຮູບນັ້ນເພິ່ງທັກທ້ວງ ພິກສຸທັງຫລາຍຊື່ນີ້ແລະຊື່ນີ້ ສົງຄ໌ສວດສມນຸພາສນ໌ເພື່ອໃຫ້ ສລະເຣື້ອງນັ້ນ ສົງຄ໌ເຫັນ
ດ້ວຍ ເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືຄວາມນິ່ງນັ້ນເປັນມຕິຢ່າງນີ້

[໔໒໑] ຈົບຍັຕຕິ ຕ້ອງອາບັຕິທຸກກຕ ຈົບກັມວາຈາ ໒ ຄັ້ງ ຕ້ອງອາບັຕິຖຸລລັຈຈັຍ ຈົບກັມວາຈາ ຄັ້ງສຸດທ້າຍ ຕ້ອງອາບັຕິສັງຄາທິເສສ ເມື່ອພວກທ່ານຕ້ອງອາບັຕິສັງຄາທິເສສ ອາບັຕິທຸກກຕ(ທີ່ ຕ້ອງ) ເພາະຍັຕຕິ ອາບັຕິຖຸລລັຈຈັຍ(ທີ່ຕ້ອງ) ເພາະກັມວາຈາ໒ ຄັ້ງ ຍ່ອມຣະງັບໄປ ສົງຄ໌ເພິ່ງ ສວດສມນຸພາສນ໌ພິກສຸ ໒-໓ ຮູບຄາວ ດຽວກັນ ບໍ່ເພິ່ງສວດສມນຸພາສນ໌ ພິກສຸມາກກວ່ານັ້ນ ຄາວດຽວກັນ
ຄຳວ່າ ເປັນສັງຄາທິເສສ ຄວາມວ່າ ສຳລັບອາບັຕິນັ້ນ ສົງຄ໌ເທົ່ານັ້ນໃຫ້ປຣິວາສ ຯລຯ
ເພາະເຫຕຸນັ້ນ ພຣະຜູ້ມີພຣະພາຄຈຶ່ງຕຣັສຮຽກວ່າ "ເປັນສັງຄາທິເສສ"

ບົທພາຊນີຍ໌

[໔໔໔] ກັມທີ່ທຳຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳຖືກຕ້ອງ ບໍ່ສລະ ຕ້ອງອາບັຕິສັງຊາທິເສສ
ກັມທີ່ທຳຖືກຕ້ອງ ພິກສຸບໍ່ແນ່ໃຈ ບໍ່ສລະ ຕ້ອງອາບັຕິສັງຊາທິເສສ
ກັມທີ່ທຳຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳບໍ່ຖືກຕ້ອງ ບໍ່ສລະ ຕ້ອງອາບັຕິ ສັງຊາທິເສສ
ກັມທີ່ທຳບໍ່ຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳຖືກຕ້ອງ ຕ້ອງອາບັຕິທຸກກົຕ
ກັມທີ່ທຳບໍ່ຖືກຕ້ອງ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກົຕ
ກັມທີ່ທຳບໍ່ຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳບໍ່ຖືກຕ້ອງ ຕ້ອງອາບັຕິທຸກກົຕ

### ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໔໔໖] ໑. ພິກສຸຍັງບໍ່ຖືກສວດສມນຸພາສນ໌
໒. ພິກສຸຜູ້ຍອມສລະ
໓. ພິກສຸວິກົລຈິຕ
໔. ພິກສຸມີຈິຕປັ່ນປ່ວນ
໕. ພິກສຸກະວົນກະວາຍເພາະເວທນາ
໖. ພິກສຸຕົ້ນບັນຍັຕ

### ສັງຊເພທານຸວັຕຕກສິກຂາບົທທີ ໑໑ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ສັງຊາທິເສສກັນຫ໌] ໑໒. ທຸພພຈສິກຂາບົທ ນິທານວັຕຖຸ

## ໑໒. ທຸພພຈສິກຂາບົທ
### ວ່າດ້ວຍພິກສຸເປັນຄົນວ່າຍາກ
### ເຣື້ອງພຣະສັນນະ

[໔໔໗] ສມັຍນັ້ນພຣະຜູ້ມີພຣະພາຄພຸທຫເຈົ້າປະທັບຢູ່ ນະ ໂຊສິຕາຣາມ ເຂຕກຸງ ໂກສັມພີ ຄັ້ງນັ້ນ ທ່ານພຣະສັນນະ ປະພຶດບໍ່ສົມຄວຣ ພິກສຸທັງຫລາຍວ່າກ່າວຕັກເຕືອນຢ່າງນີ້ວ່າ "ທ່ານສັນນະ ທ່ານຢ່າໄດ້ກະທຳຢ່າງນີ້ ກາຣກະທຳຢ່າງນັ້ນ ບໍ່ສົມຄວຣ" ທ່ານພຣະສັນນະກ່າວຢ່າງນີ້ວ່າ "ພວກທ່ານສຳຄັນວ່າເຮົາເປັນຜູ້ທີ່ພວກທ່ານຄວຣວ່າກ່າວຕັກເຕືອນຫລື ເຮົາຕ່າງຫາກສົມຄວຣວ່າກ່າວຕັກເຕືອນພວກທ່ານ ພຣະພຸທຫເຈົ້າເປັນຂອງເຮົາ ພຣະທັມເປັນຂອງເຮົາ ພຣະທັມອັນພຣະລູກ

ເຈົ້າຂອງເຮົາເປັນຜູ້ຕຣັສຮູ້ແລ້ວ ພວກທ່ານຕ່າງຊື່ ຕ່າງໂຄຕຣ ຕ່າງຊາຕິ ຕ່າງຕະກູນ ມາບວຊຮວມກັນ ດຸຈລົມພາຍຸພັດຫຍ້າ ໄມ້ແລະໃບໄມ້ແຫ້ງມາຮວມກັນ ຫລືດຸຈແມ່ນ້ຳໄຫລຈາກພູເຂົາພັດຈອກແຫນມາຮວມກັນໄວ້" ບັນດາພິກສຸຜູ້ມັກນ້ອຍສັນໂດສ ມີຄວາມລະອາຍ ມີຄວາມຣະມັດຣະວັງ ໃຝ່ການສຶກສາພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດທ່ານພຣະສັນນະ ເມື່ອພິກສຸທັງຫລາຍວ່າກ່າວຕັກເຕືອນໂດຍຊອບທັມຈຶ່ງທຳຕົວໃຫ້ເປັນຄົນທີ່ວ່າກ່າວຕັກເຕືອນບໍ່ໄດ້ລະ" ຄັນພິກສຸທັງຫລາຍຕຳຫນິທ່ານພຣະສັນນະ ໂດຍປະການຕ່າງໆ ແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງ ຊາບ

ຊົງປະຊຸມສົງຊ໌ບັນຍັຕສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຊ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະສັນນະວ່າ "ສັນນະ ຊາບວ່າ ທ່ານອັນພິກສຸທັງຫລາຍວ່າກ່າວຕັກເຕືອນໂດຍຊອບທັມ ກັບທຳຕົວໃຫ້ເປັນຄົນທີ່ວ່າກ່າວຕັກເຕືອນບໍ່ໄດ້ ແມ່ນແທ້ບໍ" ທ່ານພຣະສັນນະທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ໂມຂບຸຣຸສ ການກະທຳຢ່າງນີ້ບໍ່ສົມຄວຣ ຯລຯ ບໍ່ຄວຣທຳ ໂມຂບຸຣຸສ ຈັ່ງໃດທ່ານອັນພິກສຸທັງຫລາຍວ່າກ່າວຕັກເຕືອນໂດຍຊອບທັມ ຈຶ່ງທຳຕົວໃຫ້ເປັນຄົນທີ່ວ່າກ່າວຕັກເຕືອນບໍ່ໄດ້ ໂມຂບຸຣຸສ ການກະທຳຢ່າງນີ້ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍ ຍົກສິກຂາບົທນີ້ຂຶ້ນສະແດງ ດັ່ງນີ້

ພຣະບັນຍັຕ

[໔໒໕] ກໍ ພິກສຸເປັນຄົນວ່າຍາກ ອັນພິກສຸທັງຫລາຍວ່າກ່າວຕັກເຕືອນໂດຍຊອບທັມ ໃນສິກຂາບົທທີ່ມາໃນອຸທເທສ ກັບທຳຕົວໃຫ້ເປັນຄົນທີ່ວ່າກ່າວຕັກເຕືອນບໍ່ໄດ້ ໂດຍກ່າວວ່າ "ພວກທ່ານຢ່າວ່າກ່າວຫຍັງເຮົາ ບໍ່ວ່າດີຫລືຊົ່ວ ເຖິງເຮົາກໍຈະບໍ່ວ່າກ່າວຫຍັງພວກທ່ານ ບໍ່ວ່າດີຫລືຊົ່ວເຫມືອນກັນ ພວກທ່ານງົດເວັ້ນວ່າກ່າວເຮົາເຖີດ" ພິກສຸນັ້ນອັນພິກສຸທັງຫລາຍເພິງວ່າກ່າວຕັກເຕືອນຢ່າງນີ້ວ່າ "ທ່ານຢ່າທຳຕົວໃຫ້ເປັນຄົນທີ່ວ່າກ່າວຕັກເຕືອນບໍ່ໄດ້ ຈົ່ງທຳຕົວໃຫ້ເປັນຄົນທີ່ເຂົາວ່າກ່າວຕັກເຕືອນໄດ້ ແມ່ນວ່າທ່ານກໍຈົ່ງວ່າກ່າວຕັກເຕືອນພິກສຸທັງຫລາຍໂດຍຊອບທັມ ແມ່ນວ່າພິກສຸທັງຫລາຍກໍຈະວ່າກ່າວຕັກເຕືອນທ່ານໂດຍຊອບທັມ ເພາະວ່າບໍຣິສັດຂອງພຣະຜູ້ມີພຣະພາຄຈະເຣີນແລ້ວດ້ວຍອາການຢ່າງນີ້ ຄືດ້ວຍການວ່າກ່າວຕັກເຕືອນກັນແລະກັນ ດ້ວຍການຊ່ອຍເຫລືອ

ກັນແລະກັນໃຫ້ອອກຈາກອາບັຕິ” ພິກສຸນັ້ນ ອັນພິກສຸທັງຫລາຍວ່າກ່າວຕັກເຕືອນຢູ່ຢ່າງນີ້ ກໍຍັງຍົກຍ້ອງຢູ່ຢ່າງນັ້ນ ພິກສຸນັ້ນອັນພິກສຸທັງຫລາຍເພິ່ງສວດສມນຸພາສນ໌ຈົນຄົບ ໓ ຄັ້ງເພື່ອໃຫ້ສລະເລື້ອງນັ້ນ ຖ້າທ່ານກຳລັງຖືກສວດສມນຸພາສນ໌ກ່ອນຈະຄົບ ໓ ຄັ້ງ ສລະເລື້ອງນັ້ນໄດ້ ນັ້ນເປັນການດີ ຖ້າທ່ານບໍ່ສລະ ເປັນສັງຂາທິເສສ

ເລື້ອງພຣະສັນນະ ຈົບ

## ພຣະວິນັຍປີດົກ ມຫາວິພັງຄ໌ [໔. ສັງຂາທິເສສກັນຫ໌] ໑໔. ທຸພພຈສິກຂາບົທ ສິກຂາບົທວິພັງຄ໌ ສິກຂາບົທວິພັງຄ໌

[໔໔໓] ຄຳວ່າ ກໍ...ພິກສຸເປັນຄົນວ່າຍາກ ຄວາມວ່າ ເປັນຜູ້ວ່າຍາກ ປະກອບດ້ວຍທັມທີ່ເຮັດໃຫ້ເປັນຄົນວ່າຍາກ ບໍ່ອົດທົນຮັບຄຳສອນໂດຍເຄົາຣົພ

ຄຳວ່າ ໃນສິກຂາບົທທີ່ມາໃນອຸທເທສ ໄດ້ແກ່ ໃນສິກຂາບົທທີ່ມາໃນພຣະປາຕິໂມກຂ໌

ຄຳວ່າ ພິກສຸທັງຫລາຍ ໄດ້ແກ່ ພິກສຸເຫລົ່າອື່ນ

ຊື່ວ່າ ໂດຍຊອບທັມ ຄື ສິກຂາບົທທີ່ພຣະຜູ້ມີພຣະພາຄຊົງບັຍຍັຕຕິແລ້ວ ນັ້ນ

ຊື່ວ່າ ໂດຍຊອບທັມ

ພິກສຸນັ້ນອັນພິກສຸທັງຫລາຍວ່າກ່າວຕັກເຕືອນຢູ່ໂດຍສິກຂາບົທຊອບທັມນັ້ນ ກັບທຳຕົວໃຫ້ເປັນຄົນທີ່ວ່າກ່າວຕັກເຕືອນບໍ່ໄດ້ໂດຍກ່າວວ່າ “ພວກທ່ານຢ່າວ່າກ່າວຫຍັງເຮົາບໍ່ວ່າດີຫລືຊົ່ວ ເຖິງເຮົາກໍຈະບໍ່ວ່າກ່າວຫຍັງພວກທ່ານ ບໍ່ວ່າດີຫລືເລວ ພວກທ່ານຈົ່ງເວັ້ນວ່າກ່າວເຮົາເຖີດ”

ຄຳວ່າ ພິກສຸນັ້ນ ໄດ້ແກ່ ພິກສຸຜູ້ວ່າຍາກນັ້ນ

ອທິບາຍວ່າ ພິກສຸຜູ້ໄດ້ເຫັນ ຜູ້ໄດ້ຍິນເພິ່ງວ່າກ່າວຕັກເຕືອນພິກສຸເປັນຄົນວ່າຍາກນັ້ນວ່າ “ທ່ານຢ່າທຳຕົວໃຫ້ເປັນຄົນທີ່ວ່າກ່າວຕັກເຕືອນບໍ່ໄດ້ ຈົ່ງທຳຕົວໃຫ້ເປັນຄົນທີ່ວ່າກ່າວຕັກເຕືອນໄດ້ ແມ່ນວ່າທ່ານຈົ່ງວ່າກ່າວຕັກເຕືອນພິກສຸທັງຫລາຍໂດຍຊອບທັມ ແມ່ນວ່າພິກສຸທັງຫລາຍກໍຈະວ່າກ່າວຕັກເຕືອນທ່ານໂດຍຊອບທັມ ເພາະວ່າບໍຣິສັດຂອງພຣະຜູ້ມີພຣະພາຄຈະເຈີນແລ້ວດ້ວຍອາການຢ່າງນີ້ ຄື ດ້ວຍການວ່າກ່າວຕັກເຕືອນກັນແລະກັນ ດ້ວຍການຊ່ວຍເຫລືອກັນແລະກັນໃຫ້ອອກຈາກອາບັຕິ” ຄວນວ່າກ່າວຕັກເຕືອນທ່ານແມ່ນຄັ້ງທີ ໒ ຄວນວ່າກ່າວຕັກເຕືອນທ່ານແມ່ນຄັ້ງທີ ໓ ຖ້າທ່ານສລະໄດ້ ນັ້ນເປັນການດີ ຖ້າທ່ານບໍ່ສລະ ຕ້ອງອາບັຕິທຸກກົຕ

ພິກສຸທັງຫລາຍໄດ້ຍິນແລ້ວບໍ່ວ່າກ່າວຕັກເຕືອນ ຕ້ອງອາບັຕິທຸກກຕ ພິກສຸນັ້ນອັນພິກສຸທັງຫລາຍ ເພິງຄຸມຕົວມາສູ່ທ່າມກາງສົງຊ໌ ວ່າກ່າວຕັກເຕືອນວ່າ "ທ່ານຢ່າທຳຕົວໃຫ້ເປັນຄົນທີ່ວ່າກ່າວຕັກເຕືອນບໍ່ໄດ້ ຈົ່ງທຳຕົວໃຫ້ເປັນຄົນທີ່ເຂົາວ່າກ່າວຕັກເຕືອນໄດ້ ແມ່ນວ່າທ່ານຈົ່ງວ່າກ່າວຕັກເຕືອນພິກສຸທັງຫລາຍໂດຍຊອບທັມ ແມ່ນວ່າພິກສຸທັງຫລາຍກໍຈະວ່າກ່າວຕັກເຕືອນທ່ານໂດຍຊອບທັມ ເພາະບໍຣິສັດຂອງພຣະຜູ້ມີພຣະພາຄຈະເຣີນແລ້ວດ້ວຍອາການຢ່າງນີ້ ຄື ດ້ວຍການວ່າກ່າວຕັກເຕືອນກັນແລະກັນ ດ້ວຍການຊ່ວຍເຫລືອກັນແລະກັນໃຫ້ອອກຈາກອາບັຕິ" ຄວຣວ່າກ່າວຕັກເຕືອນທ່ານແມ່ນຄັ້ງທີ ໒ ຄວຣວ່າກ່າວຕັກເຕືອນທ່ານແມ່ນຄັ້ງທີ ໓ ຖ້າທ່ານສລະໄດ້ ນັ້ນເປັນການດີ ຖ້າທ່ານບໍ່ສລະ ຕ້ອງອາບັຕິທຸກກຕ ສົງຊ໌ເພິງສວດສມນຸພາສນ໌ ທ່ານ

### ວິທີສວດສມນຸພາສນ໌ ແລະກັມວາຈາສວດສມນຸພາສນ໌

ພິກສຸທັງຫລາຍເພິງສວດສມນຸພາສນ໌ພິກສຸນັ້ນຢ່າງນີ້ ຄື ພິກສຸຜູ້ສລາດສາມາດເພິງປະກາດໃຫ້ສົງຊ໌ຊາບວ່າ

[໔໑໗] ທ່ານຜູ້ຈະເຣີນ ຂໍສົງຊ໌ຈົ່ງຟັງຂ້າພະເຈົ້າ ພິກສຸຊື່ນີ້ອັນພິກສຸທັງຫລາຍວ່າກ່າວຕັກເຕືອນໂດຍຊອບທັມ ກັບທຳຕົວໃຫ້ເປັນຄົນທີ່ວ່າກ່າວຕັກເຕືອນບໍ່ໄດ້ ພິກສຸນັ້ນບໍ່ຍອມສລະເຣື່ອງນັ້ນ ຖ້າສົງຊ໌ພ້ອມກັນແລ້ວເພິງສວດສມນຸພາສນ໌ພິກສຸຊື່ນີ້ເພື່ອໃຫ້ສລະເຣື່ອງນັ້ນ ນີ້ເປັນຍັຕຕິ ທ່ານຜູ້ຈະເຣີນ ຂໍສົງຊ໌ຈົ່ງຟັງຂ້າພະເຈົ້າ ພິກສຸຊື່ນີ້ອັນພິກສຸທັງຫລາຍວ່າກ່າວຕັກເຕືອນໂດຍຊອບທັມ ກັບທຳຕົວໃຫ້ເປັນຄົນທີ່ວ່າກ່າວຕັກເຕືອນບໍ່ໄດ້ ພິກສຸນັ້ນບໍ່ຍອມສລະເຣື່ອງນັ້ນ ສົງຊ໌ສວດສມນຸພາສນ໌ພິກສຸຊື່ນີ້ເພື່ອໃຫ້ສລະເຣື່ອງນັ້ນ ທ່ານຮູບໃດເຫັນດ້ວຍກັບການສວດສມນຸພາສນ໌ພິກສຸຊື່ນີ້ເພື່ອໃຫ້ສລະເຣື່ອງນັ້ນ ທ່ານຮູບນັ້ນເພິງນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນເພິງທັກທ້ວງ ແມ່ນຄັ້ງທີ ໒ ຯລຯ ແມ່ນຄັ້ງທີ ໓ ຂ້າພະເຈົ້າກໍກ່າວຄວາມນີ້ວ່າ ທ່ານຜູ້ຈະເຣີນ ຂໍສົງຊ໌ຈົ່ງຟັງຂ້າພະເຈົ້າ ພິກສຸຊື່ນີ້ອັນພິກສຸທັງຫລາຍວ່າກ່າວຕັກເຕືອນໂດຍຊອບທັມ ກັບທຳຕົວໃຫ້ເປັນຄົນທີ່ວ່າກ່າວຕັກເຕືອນບໍ່ໄດ້ ພິກສຸນັ້ນບໍ່ຍອມສລະເຣື່ອງນັ້ນ ສົງຊ໌ສວດສມນຸພາສນ໌ພິກສຸຊື່ນີ້ເພື່ອໃຫ້ສລະເຣື່ອງນັ້ນ ທ່ານຮູບໃດເຫັນດ້ວຍກັບການສວດສມນຸພາສນ໌ພິກສຸຊື່ນີ້ ເພື່ອໃຫ້ສລະເຣື່ອງນັ້ນ ທ່ານຮູບນັ້ນເພິງນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນເພິງທັກທ້ວງພິກສຸຊື່ນີ້ສົງຊ໌ສວດສມນຸພາສນ໌ ເພື່ອໃຫ້ສລະເຣື່ອງນັ້ນ ສົງຊ໌ເຫັນດ້ວຍ ເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືຄວາມນິ່ງນັ້ນເປັນມຕິຢ່າງນີ້

[໔໒໗] ຈົບຍັຕຕິ ຕ້ອງອາບັຕິທຸກກຕ ຈົບກັມວາຈາ ໒ ຄັ້ງ ຕ້ອງອາບັຕິຖຸລລັຈຈັຍ ຈບກັມວາຈາ ຄັ້ງສຸດທ້າຍ ຕ້ອງອາບັຕິສັງຊາທິເສສ ເມື່ອທ່ານຕ້ອງອາບັຕິສັງຊາທິເສສ ອາບັຕິທຸກກຕ(ທີ່ຕ້ອງ) ເພາະຍັຕຕິ ອາບັຕິຖຸລລັຈຈັຍ(ທີ່ຕ້ອງ) ເພາະກັມວາຈາ ໒ ຄັ້ງ ຍ່ອມຣະງັບໄປ

ຄຳວ່າ ເປັນສັງຊາທິເສສ ຄວາມວ່າ ສຳລັບອາບັຕິນັ້ນ ສົງຄ໌ເທົ່ານັ້ນໃຫ້ປຣິວາສ ຯລຯ ເພາະເຫຕຸ ນັ້ນ ພຣະຜູ້ມີພຣະພາຄຈຶ່ງຕຣັສຮຽກວ່າ "ເປັນສັງຊາທິເສສ"

ບົທພາຊນີຍ໌

[໔໒໘] ກັມທີ່ທຳຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳຖືກຕ້ອງ ບໍ່ສລະຕ້ອງອາບັຕິສັງຊາທິເສສ
ກັມທີ່ທຳຖືກຕ້ອງ ພິກສຸບໍ່ແນ່ໃຈ ບໍ່ສລະ ຕ້ອງອາບັຕິສັງຊາທິເສສ
ກັມທີ່ທຳຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳບໍ່ຖືກຕ້ອງ ບໍ່ສລະ ຕ້ອງອາບັຕິສັງຊາທິເສສ
ກັມທີ່ທຳບໍ່ຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳຖືກຕ້ອງ ຕ້ອງອາບັຕິທຸກກຕ
ກັມທີ່ທຳບໍ່ຖືກຕ້ອງ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ
ກັມທີ່ທຳບໍ່ຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳບໍ່ຖືກຕ້ອງ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໔໓໐] ໑. ພິກສຸຍັງບໍ່ຖືກສວດສມນຸພາສນ໌

໒. ພິກສຸຜູ້ຍອມສລະ

໓. ພິກສຸວິກລຈິຕ

໔. ພິກສຸຕົ້ນບັນຍັຕ

ທຸພພຈສິກຂາບົທທີ ໑໒ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ສັງຊາທິເສສກັນຫ໌] ໑໓. ກຸລທູສກສິກຂາບົທ ນິທານວັຕຖຸ

໑໓. ກຸລທູສກສິກຂາບົທ

ວ່າດ້ວຍພິກສຸຜູ້ປະທຸສຮ້າຍຕະກູນ

ເຣື່ອງພິກສຸພວກພຣະອັສສຊິແລະພຣະປຸນັພພສຸກະ

[໔໓໑] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທຫເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຮາມຂອງອນາຖບິນຫິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພິກສຸຊື່ອ່າອັສສຊິແລະປຸນັພພສຸກະເປັນເຈົ້າຖິ່ນ ເປັນອລັຊຊີຊິ່ວຊາມ ຢູ່ໃນກິຕາຄິຣິຊົນບົທ ພິກສຸພວກນັ້ນ ປະພຶດບໍ່ເໝາະສົມເຫັນປານນີ້ ຄື ປູກໄມ້ດອກເອງແດ່ ໃຊ້ຜູ້ອື່ນປູກແດ່ ຣົດນ້ຳເອງແດ່ ໃຊ້ຜູ້ອື່ນຣົດແດ່ ເກັບດອກໄມ້ເອງແດ່ ໃຊ້ຜູ້ອື່ນເກັບແດ່ ຮ້ອຍດອກໄມ້ເອງແດ່ ໃຊ້ຜູ້ອື່ນຮ້ອຍແດ່ ເຮັດມາລັຍຕໍ່ກ້ານເອງແດ່ ໃຊ້ຜູ້ອື່ນເຮັດແດ່ ເຮັດມາລັຍຮຽງກ້ານເອງແດ່ ໃຊ້ຜູ້ອື່ນເຮັດແດ່ ຈັດດອກໄມ້ຊໍ່ເອງແດ່ ໃຊ້ຜູ້ອື່ນຈັດແດ່ ເຮັດດອກໄມ້ພຸ່ມເອງແດ່ ໃຊ້ຜູ້ອື່ນເຮັດແດ່ ເຮັດດອກໄມ້ມົງກຸດເອງແດ່ ໃຊ້ຜູ້ອື່ນເຮັດແດ່ ເຮັດດອກໄມ້ພວງເອງແດ່ ໃຊ້ຜູ້ອື່ນເຮັດແດ່ ເຮັດດອກໄມ້ແຜງປະດັບເອິກເອງແດ່ ໃຊ້ໃຫ້ຜູ້ອື່ນເຮັດແດ່ ພິກສຸພວກນັ້ນນຳໄປເອງແດ່ ໃຊ້ຜູ້ອື່ນນຳໄປແດ່ຊຶ່ງມາລັຍຕໍ່ກ້ານ ມາລັຍຮຽງກ້ານດອກໄມ້ຊໍ່ ດອກໄມ້ພຸ່ມ ດອກໄມ້ມົງກຸດ ດອກໄມ້ພວງ ດອກໄມ້ແຜງປະດັບເອິກ ເພື່ອກຸລສຕຣີເພື່ອກຸລຫິດາ ເພື່ອກຸລກຸມາຣີ ເພື່ອລູກໃພ້ຂອງຕະກູນ ເພື່ອທາສຍິງໃນຕະກູນ ພິກສຸພວກນັ້ນສັນອາຫາຣໃນພາຊນະດຽວກັນແດ່ ດື່ມນ້ຳໃນຂັນອັນດຽວກັນແດ່

ນັ່ງເທິງອາສນະດຽວກັນແດ່ ນອນເທິງຕຽງດຽວກັນແດ່ ນອນຮ່ວມເຄື່ອງລາດດຽວກັນແດ່ ນອນຄຸມຜ້າຫົ່ມ ຜືນດຽວກັນແດ່ ນອນຮ່ວມເຄື່ອງລາດແລະຄຸມຜ້າຫົ່ມຮ່ວມກັນແດ່ກັບກຸລສຕຣີ ກຸລຫິດາ ກຸລກຸມາຣີ ລູກໃພ້ຂອງຕະກູນ ທາສຍິງໃນຕະກູນ ພິກສຸພວກນັ້ນສັນອາຫາຣໃນເວລາວິກາລແດ່ ດື່ມນ້ຳເມົາແດ່ ທັດຊົງດອກໄມ້ຂອງຫອມແລະເຄື່ອງລູບໄລ້ແດ່ ຟ້ອນລຳແດ່ ຂັບຮ້ອງແດ່ ປະສານສຽງແດ່ ເຕັ້ນລຳແດ່ ຟ້ອນລຳກັບຍິງຟ້ອນລຳແດ່ ຂັບຮ້ອງກັບຍິງຟ້ອນລຳແດ່ ປະສານສຽງກັບຍິງຟ້ອນລຳແດ່ ເຕັ້ນລຳກັບຍິງຟ້ອນລຳແດ່ ຟ້ອນລຳກັບຍິງຂັບຮ້ອງແດ່ ຂັບຮ້ອງກັບຍິງຂັບຮ້ອງແດ່ ປະສານສຽງກັບຍິງຂັບຮ້ອງແດ່ ເຕັ້ນລຳກັບຍິງຂັບຮ້ອງແດ່ ຟ້ອນລຳກັບຍິງປະສານສຽງແດ່ ຂັບຮ້ອງກັບຍິງປະສານສຽງແດ່ ປະສານສຽງກັບຍິງປະສານສຽງແດ່ ເຕັ້ນລຳກັບຍິງປະສານສຽງແດ່ ຟ້ອນລຳກັບຍິງເຕັ້ນລຳແດ່ ຂັບຮ້ອງກັບຍິງເຕັ້ນລຳແດ່ ປະສານສຽງກັບຍິງເຕັ້ນລຳແດ່ ເຕັ້ນລຳກັບຍິງເຕັ້ນລຳແດ່ ຫລິ້ນໝາກຣຸກແຖວລະ ໘ ຕາແດ່ ແຖວລະ ໑໐ ຕາແດ່ ຫລິ້ນໝາກເກັບແດ່ ຫລິ້ນຊິງນາງແດ່ ຫລິ້ນໝາກໄຫວແດ່ ຫລິ້ນໂຍນຫ່ວງແດ່ ຫລິ້ນໄມ້ຫົ່ງແດ່ ຫລິ້ນຟາດໃຫ້ເປັນຮູບຕ່າງໆແດ່ ຫລິ້ນສກາແດ່ ຫລິ້ນເປົ່າໃບໄມ້ແດ່ ຫລິ້ນໄຖນ້ອຍໆແດ່ ຫລິ້ນທີກຄະເມນແດ່ ຫລິ້ນໄມ້ກັງຫັນແດ່ ຫລິ້ນຕວງຊາຍ ດ້ວຍໃບໄມ້ແດ່ ຫລິ້ນຣົດນ້ອຍໆແດ່ ຫລິ້ນຫນູນ້ອຍໆແດ່ ຫລິ້ນຂຽນທວາຍແດ່ ຫລິ້ນທາຍໃຈແດ່ ຫລິ້ນລໍ້ລຽນຄົນພິການແດ່ ຫັດຂີ່ຊ້າງແດ່ ຫັດຂີ່ມ້າແດ່ ຫັດຂີ່ຣົດແດ່ ຫັດຍິງຫນູແດ່ ຫັດເພງອາວຸຫແດ່ ແລ່ນຜັດປ່ຽນຊ້າງແດ່ ແລ່ນຜັດປ່ຽນມ້າແດ່

ແລ່ນຜັດປ່ຽນຣົດແດ່ ແລ່ນຂັບກັນແດ່ ແລ່ນບັງວແດ່ ຜິວປາກແດ່ ປົບມືແດ່ ປ້ຳກັນແດ່ ຕີມວຍແດ່ ປູລາດຜ້າສັງຊາຕິທ່າມກາງເວທີເຕັ້ນລຳແລ້ວເວົ້າກັບຍິງຟ້ອນລຳ ຢ່າງນີ້ວ່າ "ນ້ອງຍິງ ທ່ານຈົ່ງຟ້ອນລຳໃນທີ່ນີ້" ດັ່ງນີ້ແລ້ວ ໃຫ້ກາຣຄຳນັບແດ່ ປະພຶດບໍ່ເຫມາະສົມຕ່າງໆແດ່

[໔໓໔] ສມັຍນັ້ນ ພິກສຸຮູບນຶ່ງຈຳພັນສາໃນແຄວັ້ນກາສີແລ້ວ ເດີນທາງໄປກຸງສາວັຕຖີເພື່ອເຝົ້າພຣະຜູ້ມີພຣະພາຄ ເດີນທາງໄປຈົນເຖິງກິຕາຄີຣີຊົນບົທ ຄັນເວລາເຊົ້າ ທ່ານຄອງອັນຕຣວາສກ ຖືບາຕຣແລະຈີວອນໄປບິນທບາຕທີ່ກິຕາຄີຣີຊົນບົທ ມີກາຣກ້າວໄປ ກາຣຖອຍກັບ ກາຣແລດູ ກາຣຫລຽວດູ ກາຣຄູ້ເຂົ້າ ກາຣຢຽດ ອອກ ທີ່ຫນ້າເຫລື້ອມໃສ ສາຍຕາເບິ່ງທອດລົງ ສົມບູນສົມບູນດ້ວຍອີຣິຍາບົຖ ພວກຊາວບ້ານເຫັນພິກສຸນັ້ນແລ້ວພາກັນກ່າວຢ່າງນີ້ວ່າ "ພິກສຸນີ້ເປັນໃຜ ດູຄ້າຍບໍ່ຄ່ອຍມີກຳລັງ ເຫມືອນຄົນອ່ອນແອ ເຫມືອນຄົນຂມວດຄິ້ວກົ້ມຫນ້າ ເມື່ອທ່ານຮູບນີ້ເຂົ້າໄປບິນທບາຕ ໃຜລະຈະຖວາຍອາຫາຣບິນທບາຕ ສ່ວນພຣະອັສສຊິແລະພຣະປຸນັພພສຸກະຂອງພວກເຮົາເປັນຄົນອ່ອນໂຍນ ເວົ້າມ່ວນ ອ່ອນຫວານ ຍິ້ມແຍ້ມກ່ອນ ມັກກ່າວວ່າມາເຖີດ ແລະມາດີແລ້ວ ບໍ່ກົ້ມຫນ້າ ຫນ້າຕາຊື່ນບານ ທັກທາຍກ່ອນ ໃຜໆກໍຢາກຈະຖວາຍອາຫາຣທ່ານເຫລົ່ານັ້ນ"

ອຸບາສິກຄົນນຶ່ງເຫັນພິກສຸນັ້ນກຳລັງບິນທບາຕໃນກິຕາຄີຣີຊົນບົທ ຄັນແລ້ວໄດ້ເຂົ້າໄປຫາພິກສຸນັ້ນໄຫວ້ ແລ້ວກ່າວກັບທ່ານວ່າ "ພຣະຄຸນເຈົ້າໄດ້ອາຫາຣບິນທບາຕແດ່ບໍ່ ຂນ້ອຍ" ພິກສຸນັ້ນຕອບວ່າ "ອາຕມາຍັງບໍ່ໄດ້ອາຫາຣເລີຍ" ອຸບາສິກກ່າວນິມົນຕ໌ວ່າ "ນິມົນຕ໌ໄປເຮືອນຜູ້ຂ້າເຖີດ ຂນ້ອຍ" ແລ້ວພາພິກສຸນັ້ນໄປເຮືອນ ນິມົນຕ໌ໃຫ້ສັນແລ້ວຖາມວ່າ "ພຣະຄຸນເຈົ້າ ທ່ານຈະໄປທີ່ໃດ ຂນ້ອຍ" ພິກສຸນັ້ນຕອບວ່າ "ຈະເຣີນພອນ ອາຕມາຈະໄປກຸງສາວັຕຖີ ເພື່ອເຝົ້າພຣະຜູ້ມີພຣະພາຄ" ອຸບາສິກກ່າວວ່າ "ຖ້າເຊັ່ນນັ້ນ ທ່ານຈົ່ງຖວາຍບັງຄົມພຣະບາທຂອງພຣະຜູ້ມີພຣະພາຄດ້ວຍເກົ້າກະມ່ອມ ແລະຂໍຈົ່ງຂາບທູລຕາມຖ້ອຍຄຳຂອງຜູ້ຂ້າຢ່າງນີ້ດ້ວຍ ວ່າ

'ພຣະພຸທທເຈົ້າຂ້າ ວັດໃນກິຕາຄີຣີຊົນບົທຊຸດໂຊມ ພິກສຸຊື່ວ່າອັສສຊິແລະປຸນັພພສຸກະເປັນເຈົ້າຖິ່ນຢູ່ໃນກິຕາຄີຣີຊົນບົທ ເປັນພິກສຸອລັຊຊີຊື່ວຊາມ ພວກທ່ານປະພຶດບໍ່ເຫມາະສົມ ເຫັນປານນີ້ ຄື ປູກໄມ້ດອກເອງແດ່ ໃຊ້ຜູ້ອື່ນປູກແດ່ ຯລຯ ປະພຶດບໍ່ເຫມາະສົມຕ່າງໆ ແມ່ນພວກຊາວບ້ານທີ່ເຄີຍສັດທາເຫລື້ອມໃສແຕ່ດຽວນີ້ບໍ່ສັດທາບໍ່ເຫລື້ອມໃສ ທານທີ່ເຄີຍຖວາຍປະຈຳແກ່ສົງຂ໌ ບັດນີ້ທາຍົກທາຍິກາເຊົາຖວາຍແລ້ວ ພິກສຸຜູ້ມີສີລພາກັນຈາກໄປ ພິກສຸຜູ້ຊົ່ວຊາມຢູ່ຄອບຄອງ ຂໍປະທານວໂຣກາສເຖີດພຣະພຸທທເຈົ້າຂ້າ ຂໍພຣະຜູ້ມີພຣະພາຄໂປດສົ່ງພິກສຸທັງຫລາຍໄປກິຕາຄີຣີຊົນບົທເພື່ອວັດຈະໄດ້ຕັ້ງຫມັ້ນຢູ່ສືບໄປໃນທີ່ນັ້ນ" ພິກສຸນັ້ນຮັບຄຳຂອງຂອງອຸບາສິກແລ້ວເດີນທາງໄປ

ທາງກຸງສາວັຕຖີ ໄປເຖິງກຸງສາວັຕຖີ ເຖິງພຣະເຊຕວັນອາຣາມຂອງອນາຖບິນທິກເສດຖີໂດຍລຳດັບ ເຂົ້າເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ແລ້ວຖວາຍບັງຄົມພຣະຜູ້ມີພຣະພາຄນັ່ງລົງ ນະ ທີ່ສົມຄວຣ

ພຸທທປະເພນີ

ອັນກາຣທີ່ພຣະຜູ້ມີພຣະພາຄພຸທທເຈົ້າທັງຫລາຍ ຊົງປາສັຍກັບພຣະອາຄັນຕຸກະທັງຫລາຍ ນັ້ນເປັນພຸທທປະເພນີ ລຳດັບນັ້ນ ພຣະຜູ້ມີພຣະພາຄຕຣັສຖາມພິກສຸນັ້ນວ່າ “ພິກສຸ ທ່ານຍັງສະບາຍດີຫລື ຍັງພໍເປັນຢູ່ໄດ້ຫລື ທ່ານເດີນທາງມາໂດຍບໍ່ລຳບາກຫລື ທ່ານມາຈາກໃສ” ພິກສຸນັ້ນຂາບທູລວ່າ “ສະບາຍດີ ພຣະພຸທທເຈົ້າຂ້າ ພໍເປັນຢູ່ໄດ້ ພຣະພຸທທເຈົ້າຂ້າ ຂ້າພຣະພຸທທເຈົ້າເດີນທາງມາໂດຍບໍ່ລຳບາກ ພຣະພຸທທເຈົ້າຂ້າ ຂ້າພຣະພຸທທເຈົ້າຈຳພັນສາໃນແຄວັນກາສີ ເມື່ອຈະມາເຝົ້າພຣະອົງຄ໌ທີ່ເມືອງນີ້ ເດີນທາງຜ່ານກິຕາຄີຣີຊົນບົທ ເວລາເຊົ້າຄອງອັນຕຣວາສກ ຖືບາຕຣແລະຈີວອນເຂົ້າໄປບິນທບາຕໃນກິຕາຄີຣີຊົນບົທ ອຸບາສົກຄົນນຶ່ງເຫັນຂ້າພຣະພຸທທເຈົ້າກຳລັງທຽວບິນທບາຕ ເຂົ້າມາຫາ ໄຫວ້ແລ້ວຖາມວ່າ ‘ພຣະຄຸນເຈົ້າໄດ້ອາຫາຣບິນທບາຕແດ່ບໍ ຂນ້ອຍ’ ຯລຯ ເຂົາກ່າວວ່າ ‘ທ່ານຂນ້ອຍ ຖ້າເຊັ່ນນັ້ນ ຂໍທ່ານຈົ່ງຖວາຍບັງຄົມພຣະບາທຂອງພຣະຜູ້ມີພຣະພາຄດ້ວຍສຽນກະມ່ອມ ແລະຂໍຈົ່ງຂາບທູລຕາມຖ້ອຍຄຳຂອງຜູ້ຂ້າຢ່າງນີ້ວ່າ ‘ພຣະພຸທທເຈົ້າຂ້າ ວັດໃນກິຕາຄີຣີຊົນບົທຊຸດໂຊມ ພິກສຸຊື່ວ່າອັສສຊີແລະປຸນັພພສຸກະເປັນເຈົ້າຖິ່ນ ຢູ່ໃນກິຕາຄີຣີຊົນບົທເປັນພິກສຸອລັຊຊີຊົ່ວຊາມ ພວກທ່ານປະພຶດບໍ່ເຫມາະສົມເຫັນປານນີ້ ຄື ປູກໄມ້ດອກເອງແດ່ ໃຊ້ຜູ້ອື່ນປູກແດ່ ຯລຯ ປະພຶດບໍ່ເຫມາະສົມຕ່າງໆ ແມ່ນພວກຊາວບ້ານທີ່ເຄີຍສັດທາເຫລື້ອມໃສ ແຕ່ດຽວນີ້ບໍ່ສັດທາ ບໍ່ເຫລື້ອມໃສ ທານທີ່ເຄີຍຖວາຍປະຈຳແກ່ສົງຂ໌ ບັດນີ້ທາຍົກທາຍິກາເຊົາຖວາຍແລ້ວ ພິກສຸຜູ້ມີສີລພາກັນຈາກໄປ ພິກສຸຜູ້ຊົ່ວຊາມຢູ່ຄອບຄອງ ຂໍປະທານອໂຣກາສເຖີດພຣະພຸທທເຈົ້າຂ້າ ຂໍພຣະຜູ້ມີພຣະພາຄໂປຣດສົ່ງພິກສຸທັງຫລາຍໄປສູ່ກິຕາຄີຣີຊົນບົທເພື່ອວັດຈະໄດ້ຕັ້ງຫມັ້ນຢູ່ສືບໄປໃນທີ່ນັ້ນ’ ຂ້າພຣະພຸທທເຈົ້າມາຈາກກິຕາຄີຣີຊົນບົທນັ້ນ ພຣະພຸທທເຈົ້າຂ້າ”

ຊົງສອບຖາມແລ້ວຕຳຫນິ

[໔໓໓] ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພິກສຸທັງຫລາຍວ່າ “ພິກສຸທັງຫລາຍ ຊາບວ່າ ພິກສຸຊື່ວ່າອັສສຊີແລະປຸນັພພສຸກະເປັນເຈົ້າຖິ່ນ ເປັນພິກສຸອລັຊຊີ ຊົ່ວຊາມ ຢູ່ໃນກິຕາຄີຣີຊົນບົທ ປະພຶດບໍ່ເຫມາະສົມເຫັນປານນີ້ ຄື ປູກໄມ້ດອກເອງແດ່ ໃຊ້ຜູ້ອື່ນປູກແດ່ ຣົດນ້ຳເອງແດ່ ໃຫ້ຜູ້ອື່ນຣົດແດ່ ເກັບດອກໄມ້ເອງແດ່ ໃຊ້

ຜູ້ອື່ນເກັບແດ່ ຮ້ອຍດອກໄມ້ເອງແດ່ ໃຊ້ຜູ້ອື່ນຮ້ອຍແດ່ ເຮັດມາລັຍຕໍ່ກ້ານເອງແດ່ ໃຊ້ຜູ້ອື່ນເຮັດແດ່ ເຮັດມາລັຍຮຽງກ້ານເອງແດ່ ໃຊ້ຜູ້ອື່ນເຮັດແດ່ ຈັດດອກໄມ້ຊໍ່ເອງແດ່ ໃຊ້ຜູ້ອື່ນຈັດແດ່ ເຮັດດອກໄມ້ພຸ່ມເອງແດ່ ໃຊ້ຜູ້ອື່ນເຮັດແດ່ ເຮັດດອກໄມ້ມົງກຸດເອງແດ່ ໃຊ້ຜູ້ອື່ນເຮັດແດ່ ເຮັດດອກໄມ້ພວງເອງແດ່ ໃຊ້ຜູ້ອື່ນເຮັດແດ່ ເຮັດດອກໄມ້ແຜງປະດັບເອິກເອງແດ່ ໃຊ້ຜູ້ອື່ນເຮັດແດ່ ຯລຯ ປະພຶດບໍ່ເໝາະສົມຕ່າງໆ ແມ່ນພວກຊາວບ້ານທີ່ເຄີຍສັດທາເຫລື້ອມໃສ ແຕ່ດຽວນີ້ບໍ່ສັດທາບໍ່ເຫລື້ອມໃສ ທານທີ່ເຄີຍຖວາຍປະຈຳແກ່ສົງຂ໌ ບັດນີ້ ທາຍົກທາຍິກາໄດ້ເຊົາຖວາຍແລ້ວ ພິກສຸຜູ້ມີສີລພາກັນຈາກໄປ ພິກສຸຜູ້ຊົ່ວຊາມຢູ່ຄອບຄອງ ແມ່ນແທ້ບໍ່” ພິກສຸທັງຫລາຍຂາບທູລວ່າ “ແມ່ນແທ້ພຣະພຸທທເຈົ້າຂ້າ” ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິວ່າ “ພິກສຸທັງຫລາຍ ກາຣກະທຳຂອງໂມຂບຸຣຸສເຫລົ່ານັ້ນບໍ່ສົມຄວຣ ຯລຯ ບໍ່ຄວຣທຳ ພິກສຸທັງຫລາຍ ຈັ່ງໃດໂມຂບຸຣຸສເຫລົ່ານັ້ນຈຶ່ງປະພຶດບໍ່ເໝາະສົມຢ່າງນີ້ ຄື ປູກໄມ້ດອກເອງແດ່ ໃຊ້ຜູ້ອື່ນປູກແດ່ ຮົດນ້ຳເອງແດ່ ໃຫ້ຜູ້ອື່ນຮົດແດ່ ເກັບດອກໄມ້ເອງແດ່ ໃຊ້ຜູ້ອື່ນເກັບແດ່ ຮ້ອຍດອກໄມ້ເອງແດ່ ໃຊ້ຜູ້ອື່ນຮ້ອຍແດ່ ເຮັດມາລັຍຕໍ່ກ້ານເອງແດ່ ໃຊ້ຜູ້ອື່ນເຮັດແດ່ ເຮັດມາລັຍຮຽງກ້ານເອງແດ່ ໃຊ້ຜູ້ອື່ນເຮັດແດ່ ຈັດດອກໄມ້ຊໍ່ເອງແດ່ ໃຊ້ຜູ້ອື່ນຈັດແດ່ ເຮັດດອກໄມ້ພຸ່ມເອງແດ່ ໃຊ້ຜູ້ອື່ນເຮັດແດ່ ເຮັດດອກໄມ້ມົງກຸດເອງແດ່ ໃຊ້ຜູ້ອື່ນເຮັດແດ່ ເຮັດດອກໄມ້ພວງເອງແດ່ ໃຊ້ຜູ້ອື່ນເຮັດແດ່ ເຮັດດອກໄມ້ແຜງປະດັບເອິກ ເອງແດ່ ໃຊ້ຜູ້ອື່ນເຮັດແດ່ ພິກສຸພວກນັ້ນນຳໄປເອງແດ່ ໃຊ້ຜູ້ອື່ນນຳໄປແດ່ຊຶ່ງມາລັຍຕໍ່ກ້ານ ມາລັຍຮຽງກ້ານ ດອກໄມ້ຊໍ່ ດອກບໍ່ພຸ່ມ ດອກໄມ້ມົງກຸດ ດອກໄມ້ພວງ ດອກໄມ້ແຜງປະດັບເອິກ ເພື່ອກຸລສຕຣີ ເພື່ອກຸລທິດາ ເພື່ອກຸລກຸມາຣີ ເພື່ອລູກໃພ້ຂອງຕະກູນ ເພື່ອທາສຍິງໃນຕະກູນ ພິກສຸພວກນັ້ນສັນອາຫາຣໃນພາຊນະດຽວກັນແດ່ ດື່ມນ້ຳໃນຂັນໃບດຽວກັນແດ່ ນັ່ງເທິງອາສນະດຽວກັນແດ່ ນອນເທິງຕຽງດຽວກັນແດ່ ນອນຮ່ວມເຄື່ອງລາດດຽວກັນແດ່ນອນຄຸມຜ້າຫົ່ມຜືນດຽວກັນແດ່ ນອນຮ່ວມເຄື່ອງລາດແລະຄຸມຜ້າຫົ່ມຮ່ວມກັນແດ່ກັບກຸລສຕຣີ ກຸລທິດາ ກຸລກຸມາຣີ ລູກໃພ້ຂອງຕະກູນ ທາສຍິງໃນຕະກູນ ພິກສຸພວກນັ້ນສັນອາຫາຣໃນເວລາວິກາລແດ່ ດື່ມນ້ຳເມົາແດ່ ທັດຊົງດອກໄມ້ຂອງຫອມແລະເຄື່ອງລູບໄລ້ແດ່ ຟ້ອນລຳແດ່ ຂັບຮ້ອງແດ່ ປະສານສຽງແດ່ ເຕັ້ນລຳແດ່ ຟ້ອນລຳກັບຍິງຟ້ອນລຳແດ່ ຂັບຮ້ອງກັບຍິງຟ້ອນລຳແດ່ ປະສານສຽງກັບຍິງຟ້ອນລຳແດ່ ເຕັ້ນລຳກັບຍິງຟ້ອນລຳແດ່ ຟ້ອນລຳກັບຍິງຂັບຮ້ອງແດ່ ຂັບຮ້ອງກັບຍິງຂັບຮ້ອງແດ່ ປະສານສຽງກັບຍິງຂັບຮ້ອງແດ່ ເຕັ້ນລຳກັບຍິງຂັບຮ້ອງແດ່ ຟ້ອນລຳກັບຍິງປະສານສຽງແດ່ ຂັບຮ້ອງກັບຍິງປະສານສຽງແດ່ ປະສານສຽງກັບຍິງປະສານສຽງແດ່ ເຕັ້ນລຳກັບຍິງປະສານສຽງແດ່ ຟ້ອນລຳກັບຍິງເຕັ້ນລຳແດ່ ຂັບຮ້ອງກັບຍິງເຕັ້ນລຳແດ່ ປະສານສຽງກັບຍິງເຕັ້ນລຳແດ່ ເຕັ້ນລຳກັບ

ຍິງເຕັ້ນລຳແດ່ ຫລິ້ນຫມາກຣຸກແຖວລະ ໗ ຕາແດ່ ແຖວລະ ໑໐ ຕາແດ່ ຫລິ້ນຫມາກເກັບແດ່ ຫລິ້ນຊີງນາງແດ່ ຫລິ້ນຫມາກໄຫວແດ່ ຫລິ້ນໂຍນຫ່ວງແດ່ ຫລິ້ນໄມ້ຫຶ່ງແດ່ ຫລິ້ນຟາດໃຫ້ເປັນຮູບຕ່າງໆ ແດ່ ຫລິ້ນສກາແດ່ ຫລິ້ນເປົ່າໃບໄມ້ແດ່ ຫລິ້ນໄຖນ້ອຍໆ ແດ່ ຫລິ້ນລົ້ມຄະເມນແດ່ ຫລິ້ນໄມ້ກັງຫັນແດ່ ຫລິ້ນຕວງຊາຍດ້ວຍໃບໄມ້ແດ່ ຫລິ້ນຣົດນ້ອຍໆ ແດ່ ຫລິ້ນທຫນູນ້ອຍໆແດ່ ຫລິ້ນຂຽນທວາຍແດ່ ຫລິ້ນທວາຍໃຈແດ່ ຫລິ້ນລ້ລຽນຄົນພິການແດ່ ຫັດຂີ່ຊ້າງແດ່ ຫັດຂີ່ມ້າແດ່ ຫັດຂີ່ຣົດແດ່ ຫັດຍິງທນູແດ່ ຫັດເພງອາວຸທແດ່ ແລ່ນຜັດປ່ຽນຊ້າງແດ່ ແລ່ນຜັດປ່ຽນມ້າແດ່ ແລ່ນຜັດປ່ຽນຣົດແດ່ ແລ່ນຂັບກັນແດ່ ແລ່ນປ້ຽວແດ່ ຜິວປາກແດ່ ຕົບມືແດ່ ປ້ຳກັນແດ່ ຕີມວຍແດ່ ປູລາດຜ້າສັງຂາຕິທ່າມກາງເວທີເຕັ້ນລຳແລ້ວເວົ້າກັບຍິງຟ້ອນລຳຢ່າງນີ້ວ່າ “ນ້ອງຍິງ ທ່ານຈົ່ງຟ້ອນລຳໃນທີ່ນີ້” ດັ່ງນີ້ແລ້ວ ໃຫ້ການຄຳນັບແດ່ ປະພຶດບໍ່ເຫມາະສົມຕ່າງໆແດ່ ພິກສຸທັງຫລາຍການກະທຳຢ່າງນີ້ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ ຄົນທີ່ເຫລື້ອມໃສຢູ່ແລ້ວບາງພວກກໍຈະກາຍເປັນອື່ນໄປ”

## ຮັບສັ່ງໃຫ້ທຳປັພພາຊນີຍກັມ

ພຣະຜູ້ມີພຣະພາຄຊົງຕຳຫນິພິກສຸຊື່ວ່າອັສສຊິແລະປຸນັພພສຸກະໂດຍປະການຕ່າງໆ ແລ້ວຮັບສັ່ງຮຽກພຣະສາຣີບຸຕຣແລະພຣະໂມຄຄັລລານະມາຕຣັສວ່າ “ໄປເຖີດ ສາຣີບຸຕຣ ໂມຄຄັລລານະ ທ່ານທັງສອງຈົ່ງໄປກີຕາຄີຣີຊົນບົທ ຈົ່ງທຳປັພພາຊນີຍກັມ ພິກສຸຊື່ວ່າອັສສຊິແລະປຸນັພພສຸກະໄປຈາກກີຕາຄີຣີຊົນບົທ ເພາະພິກສຸພວກນັ້ນເປັນສັທທິວິຫາຣິກຂອງທ່ານທັງສອງ” ພຣະສາຣີບຸຕຣແລະພຣະໂມຄຄັລລານະຂາບທູລຖາມວ່າ “ພຣະພຸທທເຈົ້າຂ້າ ຂ້າພຣະພຸທທເຈົ້າຈະທຳປັພພາຊນີຍ ກັມແກ່ພິກສຸຊື່ວ່າອັສສຊິແລະປຸນັພພສຸກະໄດ້ຢ່າງໃດ ເພາະພວກທ່ານ"ໂຫດຮ້າຍ ຫຍາບຄາຍ” ພຣະຜູ້ມີພຣະພາຄຕຣັສວ່າ “ຖ້າຢ່າງນັ້ນ ທ່ານຈົ່ງໄປກັບພິກສຸຫລາຍໆ ຮູບ” ພຣະເຖຣະທັງສອງ ທູລຮັບສນອງພຣະພຸທທດຳຣັສແລ້ວ

## ວິທີທຳປັພພາຊນີຍກັມ ແລະກັມວາຈາທຳປັພພາຊນີຍກັມ

ພຣະຜູ້ມີພຣະພາຄຕຣັສວ່າ “ພິກສຸທັງຫລາຍ ເພິ່ງທຳປັພພາຊນີຍກັມຢ່າງນີ້ ເລີ້ມດ້ວຍເພິ່ງໂຈທພິກສຸຊື່ວ່າ ອັສສຊິແລະປຸນັພພສຸກະ ຄັນແລ້ວໃຫ້ພວກທ່ານໃຫ້ການ ເມື່ອພວກທ່ານໃຫ້ການແລ້ວຈຶ່ງປັບອາບັຕິ ຄັນປັບອາບັຕິແລ້ວ ພິກສຸຜູ້ສລາດສາມາດເພິ່ງປະກາດໃຫ້ສົງຂ໌ຊາບວ່າ

[໔໓໔] ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ພິກສຸຊື່ອ່າອັສສຊິແລະປຸນັພພສຸກະ ໔ ຮູບນີ້ ປະທຸສຮ້າຍຕະກູນ ປະພຶດຊົ່ວຊາມ ຄວາມປະພຶດຊົ່ວຊາມຂອງພວກທ່ານ ເຂົາໄດ້ເຫັນແລະໄດ້ຍິນກັນທົ່ວ ແລະຕະກູນທັງຫລາຍທີ່ຖືກພວກທ່ານປະທຸສຮ້າຍ ເຂົາກໍໄດ້ເຫັນແລະໄດ້ຍິນກັນທົ່ວ ຖ້າສົງຂ໌ພ້ອມກັນແລ້ວກໍເພິງທຳປັພພາຊນີຍກັມພິກສຸຊື່ອ່າອັສສຊິແລະປຸນັພພສຸກະ ໄປຈາກກິຕາຄີຣີຊິນບົທໂດຍປະກາດວ່າ 'ພິກສຸຊື່ອັສສຊິແລະປຸນັພພສຸກະບໍ່ເພິງຢູ່ໃນກິຕາຄີຣີຊິນບົທ' ນີ້ເປັນຍັຕຕິ ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ພິກສຸຊື່ອ່າອັສສຊິແລະປຸນັພພສຸກະປຣະທຸສຮ້າຍຕະກູນ ປະພຶດຊົ່ວຊາມ ຄວາມປະພຶດຂອງພວກທ່ານ ເຂົາໄດ້ເຫັນແລະໄດ້ຍິນກັນທົ່ວ ແລະຕະກູນທັງຫລາຍທີ່ຖືກພວກທ່ານປະທຸສຮ້າຍ ເຂົາກໍໄດ້ເຫັນແລະໄດ້ຍິນກັນທົ່ວ ສົງຂ໌ທຳປັພພາຊນີຍກັມພວກທ່ານໄປຈາກກິຕາຄີຣີຊິນບົທໂດຍປະກາດວ່າ 'ພິກສຸຊື່ອ່າອັສສຊິແລະປຸນັພພສຸກະ ບໍ່ເພິງຢູ່ໃນກິຕາຄີຣີຊິນບົທ' ທ່ານຮູບໃດເຫັນດ້ວຍກັບການທຳປັພພາຊນີຍກັມພິກສຸຊື່ອ່າອັສສຊິແລະປຸນັພພສຸກະໄປຈາກກິຕາຄີຣີຊິນບົທໂດຍປະກາດວ່າ 'ພິກສຸຊື່ອ່າອັສສຊິແລະປຸນັພພສຸກະບໍ່ເພິງຢູ່ໃນກິຕາຄີຣີຊິນບົທ' ທ່ານຮູບນັ້ນເພິງນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນເພິງທັກທ້ວງ" ແມ່ນຄັ້ງທີ ໔ ຯລຯ ແມ່ນຄັ້ງທີ ໓ ຂ້າພະເຈົ້າກໍກ່າວຄວາມນີ້ວ່າ ທ່ານຂນ້ອຍ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ຯລຯ ທ່ານຮູບນັ້ນເພິງທັກທ້ວງປັພພາຊນີຍກັມ ໄປຈາກກິຕາຄີຣີຊິນບົທ ສົງຂ໌ທຳແລ້ວແກ່ພິກສຸຊື່ອ່າອັສສຊິແລະປຸນັພພສຸກະໂດຍປະກາດວ່າ 'ພິກສຸຊື່ອ່າອັສສຊິແລະປຸນັພພສຸກະບໍ່ເພິງຢູ່ໃນກິຕາຄີຣີຊິນບົທ' ສົງຂ໌ເຫັນດ້ວຍ ເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືເອົາຄວາມນິ່ງນັ້ນເປັນມຕິຢ່າງນີ້"

[໔໓໕] ລຳດັບນັ້ນ ພິກສຸສົງຂ໌ມີພຣະສາຣີບຸຕຣແລະພຣະໂມຄຄັລລານະເປັນປະທານ ເດີນທາງໄປກິຕາຄີຣີຊິນບົທ ໄດ້ທຳປັພພາຊນີຍກັມພິກສຸຊື່ອ່າອັສສຊິແລະປຸນັພພສຸກະໄປຈາກກິຕາຄີຣີຊິນບົທໂດຍປະກາດວ່າ "ພິກສຸຊື່ອ່າອັສສຊິແລະປຸນັພພສຸກະບໍ່ເພິງຢູ່ໃນກິຕາຄີຣີຊິນບົທ" ພິກສຸພວກນັ້ນຖືກສົງຂ໌ທຳປັພພາຊນີຍກັມແລ້ວກໍຍັງບໍ່ປະພຶດຊອບ ບໍ່ເຊົາຈອງຫອງ ບໍ່ປະພຶດກັບຕົວ ບໍ່ຂໍຂມາພິກສຸທັງຫລາຍ ຍັງດ່າຍັງບໍຣິພາສກາຣກສົງຂ໌ ທຽວໃສ່ຄວາມວ່າກາຣກສົງຂ໌ລຳອຽງເພາະຄວາມພໍໃຈ ລຳອຽງເພາະຄວາມຂັດເຄືອງ ລຳອຽງ
ເພາະຄວາມຫລົງ ລຳອຽງເພາະຄວາມຢ້ານ ບັນດາບໍຣິວາຣຂອງພິກສຸຊື່ອ່າອັສສຊິແລະປຸນັພພສຸກະບາງພວກຫລີກໄປເສັຽກໍມີ ສິກເສັຽກໍມີບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມໂພນທະນາວ່າ "ຈັ່ງໃດພິກສຸຊື່ອ່າອັສສຊິແລະປຸນັພພສຸກະຖືກສົງຂ໌ທຳປັພພາຊນີຍກັມແລ້ວຈຶ່ງບໍ່ຍອມປະພຶດຊອບ ບໍ່ເຊົາຈອງຫອງ ບໍ່ປະພຶດກັບຕົວ ບໍ່ຂໍຂມາພິກສຸທັງຫລາຍ ຍັງດ່າຍັງບໍຣິພາສກາຣກສົງຂ໌ ທຽວໃສ່ຄວາມວ່າກາຣກສົງຂ໌ລຳອຽງເພາະຄວາມພໍໃຈ ລຳອຽງເພາະຄວາມຂັດເຄືອງລຳ

ອຽງເພາະຄວາມຫລົງ ລຳອຽງເພາະຄວາມຢ້ານ ບັນດາບໍຣິວາຣຂອງພິກສຸຊື່ວ່າອັສສຊິແລະປຸນັພພສຸກະ ບາງພວກຫລີກໄປເສັຽກໍມີ ສິກເສັຽກໍມີລະ" ຄັນພິກສຸເຫລົ່ານັ້ນ
ຕຳຫນິພິກສຸຊື່ວ່າອັສສຊິແລະປຸນັພພສຸກະໂດຍປະການຕ່າງໆ ແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

## ຊົງປະຊຸມສົງຂ໌ບັນຍັຕສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ຊາບວ່າພິກສຸຊື່ວ່າອັສສຊິແລະປຸນັພພສຸກະຖືກສົງຂ໌ທຳປັພພາຊນີຍກັມແລ້ວ ຍັງບໍ່ປະພຶດຊອບ ຯລຯ ສິກໄປກໍມີ ແມ່ນແທ້ບໍ" ພິກສຸເຫລົ່ານັ້ນທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ພິກສຸທັງຫລາຍ ການກະທຳຂອງໂມຂບຸຣຸສເຫລົ່ານັ້ນບໍ່ສົມຄວຣ ຯລຯ ບໍ່ຄວຣທຳ ພິກສຸທັງຫລາຍ ຈັ່ງໃດໂມຂບຸຣຸສເຫລົ່ານັ້ນຖືກສົງຂ໌ລົງປັພພາຊນີຍກັມແລ້ວ ຍັງບໍ່ປະພຶດຊອບ ຯລຯ ສິກໄປກໍມີລະ ພິກສຸທັງຫລາຍ ການກະທຳຢ່າງນີ້ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງ ດັ່ງນີ້

## ພຣະບັນຍັຕ

[໔໓໕] ກໍ ພິກສຸຢູ່ອາສັຍຫມູ່ບ້ານຫລືນິຄົມແຫ່ງໃດແຫ່ງນຶ່ງ ປະທຸສຮ້າຍຕະກູນ ມີຄວາມປະພຶດຊົ່ວຊາມ ຄວາມປະພຶດຊົ່ວຊາມຂອງທ່ານ ເຂົາໄດ້ເຫັນແລະໄດ້ຍິນກັນທົ່ວ ຕະກູນທັງຫລາຍທີ່ທ່ານປະທຸສຮ້າຍ ເຂົາກໍໄດ້ເຫັນແລະໄດ້ຍິນກັນທົ່ວ ພິກສຸນັ້ນອັນພິກສຸທັງຫລາຍເພິງວ່າກ່າວຕັກເຕືອນຢ່າງນີ້ວ່າ "ທ່ານປະທຸສຮ້າຍຕະກູນ ປະພຶດຊົ່ວຊາມ ຄວາມປະພຶດຊົ່ວຊາມຂອງທ່ານ ເຂົາໄດ້ເຫັນແລະໄດ້ຍິນກັນທົ່ວ ຕະກູນທັງຫລາຍທີ່ທ່ານປະທຸສຮ້າຍ ເຂົາກໍໄດ້ເຫັນແລະໄດ້ຍິນກັນທົ່ວ ທ່ານຈົ່ງອອກຈາກອາວາສນີ້ ຢ່າຢູ່ທີ່ນີ້" ແລະພິກສຸນັ້ນອັນພິກສຸທັງຫລາຍວ່າກ່າວຕັກເຕືອນຢູ່ຢ່າງນີ້ ກໍໂຕ້ຕອບພິກສຸທັງຫລາຍວ່າ "ພວກພິກສຸລຳອຽງເພາະຄວາມພໍໃຈ ລຳອຽງເພາະຄວາມຂັດເຄືອງ ລຳອຽງເພາະຄວາມຫລົງ ແລະລຳອຽງເພາະຄວາມຢ້ານ ຂັບພິກສຸບາງຮູບ ບໍ່ຂັບບາງຮູບ ເພາະອາບັຕິຢ່າງດຽວກັນ" ພິກສຸນັ້ນອັນພິກສຸທັງຫລາຍວ່າກ່າວຕັກເຕືອນຢ່າງນີ້ວ່າ "ທ່ານຢ່າເວົ້າຢ່າງນັ້ນ ພິກສຸທັງຫລາຍບໍ່ລຳອຽງເພາະຄວາມພໍໃຈ ບໍ່ລຳອຽງເພາະຄວາມຂັດເຄືອງ ບໍ່ລຳອຽງເພາະຄວາມຫລົງ ແລະ

ບໍ່ລຳອຽງເພາະຄວາມຢ້ານ ທ່ານປະທຸສຮ້າຍຕະກູນ ປະພຶດຊົ່ວຊາມ ຄວາມປະພຶດຊົ່ວຊາມຂອງທ່ານ ເຂົາໄດ້ເຫັນແລະໄດ້ຍິນກັນທົ່ວ ຕະກູນທັງຫລາຍທີ່ທ່ານປະທຸສຮ້າຍ ເຂົາກໍໄດ້ເຫັນແລະໄດ້ຍິນກັນທົ່ວ ທ່ານຈົ່ງອອກຈາກອາວາສນີ້ ຢ່າຢູ່ທີ່ນີ້" ພິກສຸນັ້ນອັນພິກສຸທັງຫລາຍວ່າກ່າວຕັກເຕືອນຢູ່ຢ່າງນີ້ ກໍຍັງຍຶກຍ້ອງຢູ່ຢ່າງນັ້ນ ພິກສຸນັ້ນອັນພິກສຸທັງຫລາຍເພິງສວດສມນຸພາສນ໌ຈົນຄົບ ໓ ຄັ້ງ ເພື່ອໃຫ້ສລະເຣື້ອງນັ້ນ ຖ້າທ່ານກຳລັງ ຖືກສວດສມນຸພາສນ໌ກ່ອນຈະຄົບ ໓ ຄັ້ງ ສລະເຣື້ອງນັ້ນໄດ້ນັ້ນເປັນກາຣດີ ຖ້າທ່ານບໍ່ສລະ ເປັນສັງຂາທິເສສ

ເຣື້ອງພິກສຸພວກພຣະອັສສຊິແລະພຣະປຸນັພພສຸກະ ຈົບ

## ສິກຂາບົທວິພັງຄ໌

[໔໓໗] ຄຳວ່າ ກໍພິກສຸ...ຫມູ່ບ້ານຫລືນິຄົມແຫ່ງໃດແຫ່ງນຶ່ງ ຄວາມວ່າ ຫມູ່ບ້ານກໍດີ ນິຄົມກໍດີ ເມືອງກໍດີ ຊື່ວ່າຫມູ່ບ້ານແລະນິຄົມ

ຄຳວ່າ ຢູ່ອາສັຍ ຄື ຈີວອນ ບິນທບາຕ ເສນາສນະ ແລະຄິລານປັຈຈັຍເພສັຊບໍຣິຂາຣເນື່ອງໃນຫມູ່ບ້ານແລະນິຄົມນັ້ນ

ຊື່ວ່າ ຕະກູນ ຫມາຍເຖິງຕະກູນ ໔ ໄດ້ແກ່ ຕະກູນກສັຕຣິຍ໌ ຕະກູນພຣາມນ໌ຕະກູນແພສຍ໌ແລະຕະກູນສູທຣ

ຄຳວ່າ ປະທຸສຮ້າຍຕະກູນ ຄື ປະທຸສຮ້າຍຕະກູນດ້ວຍດອກໄມ້ ຜົລໄມ້ ແປ້ງ ດິນຫນຽວ ໄມ້ຖູແຂ້ວ ໄມ້ໄຜ່ ກາຣແພທຍ໌ຫລືກາຣສື່ສາຣ

ຄຳວ່າ ມີຄວາມປະພຶດຊົ່ວຊາມ ຄື ປູກໄມ້ດອກເອງແດ່ ໃຊ້ຜູ້ອື່ນປູກແດ່ ຮົດນ້ຳເອງແດ່ ໃຊ້ຜູ້ອື່ນຮົດແດ່ ເກັບດອກໄມ້ເອງແດ່ ໃຊ້ຜູ້ອື່ນເກັບແດ່ ຮ້ອຍດອກໄມ້ເອງແດ່ ໃຊ້ຜູ້ອື່ນຮ້ອຍແດ່

ຄຳວ່າ ເຂົາໄດ້ເຫັນແລະໄດ້ຍິນກັນທົ່ວ ຄື ກຸ່ມຊົນທີ່ຢູ່ສະເພາະຫນ້າຊື່ວ່າ ໄດ້ເຫັນກຸ່ມຊົນທີ່ຢູ່ລັບຫລັງ ຊື່ວ່າໄດ້ຍິນ

ຄຳວ່າ ຕະກູນທັງຫລາຍທີ່ທ່ານປະທຸສຮ້າຍ ຄື ເມື່ອກ່ອນຊາວບ້ານມີສັດທາກັບກາຍເປັນຜູ້ບໍ່ມີສັດທາ ເມື່ອກ່ອນເຫລື້ອມໃສກັບກາຍເປັນຜູ້ບໍ່ເຫລື້ອມໃສ ເພາະພິກສຸນັ້ນ

ຄຳວ່າ ເຂົາໄດ້ເຫັນແລະໄດ້ຍິນກັນທົ່ວ ຄື ກຸ່ມຊົນທີ່ຢູ່ສະເພາະຫນ້າຊື່ວ່າໄດ້ເຫັນ ກຸ່ມຊົນທີ່ຢູ່ລັບ

ຫລັງຊື່ວ່າໄດ້ຍິນ

ຄຳວ່າ ພິກສຸນັ້ນ ໄດ້ແກ່ ພິກສຸຜູ້ປະທຸສຮ້າຍຕະກູນ

ຄຳວ່າ ອັນພິກສຸທັງຫລາຍ ໄດ້ແກ່ ອັນພິກສຸເຫລົ່າອື່ນ

ອທິບາຍວ່າ ພິກສຸຜູ້ໄດ້ເຫັນ ຜູ້ໄດ້ຍິນເພິງວ່າກ່າວຕັກເຕືອນພິກສຸຜູ້ປະທຸສຮ້າຍຕະກູນວ່າ "ທ່ານປະທຸສຮ້າຍຕະກູນ ປະພຶດຊົ່ວຊາມ ຄວາມປະພຶດຊົ່ວຊາມຂອງທ່ານ ເຂົາໄດ້ເຫັນແລະໄດ້ຍິນກັນທົ່ວ ຕະກູນທັງຫລາຍທີ່ທ່ານປະທຸສຮ້າຍ ເຂົາກໍໄດ້ເຫັນແລະໄດ້ຍິນກັນທົ່ວ ທ່ານຈົ່ງອອກຈາກອາວາສນີ້ ຢ່າຢູ່ທີ່ນີ້" ພິກສຸນັ້ນອັນພິກສຸທັງຫລາຍວ່າກ່າວຕັກເຕືອນ ກໍໂຕ້ຕອບພິກສຸທັງຫລາຍວ່າ "ພວກພິກສຸລຳອຽງເພາະຄວາມພໍໃຈ ລຳອຽງເພາະຄວາມຂັດເຄືອງ ລຳອຽງເພາະຄວາມຫລົງລຳອຽງເພາະຄວາມຢ້ານ ຂັບພິກສຸບາງຮູບ ບໍ່ຂັບບາງຮູບ ເພາະອາບັຕິຢ່າງດຽວກັນ"

ຄຳວ່າ ພິກສຸນັ້ນ ໄດ້ແກ່ ພິກສຸຜູ້ທີ່ຖືກລົງໂທສນັ້ນ

ຄຳວ່າ ອັນພິກສຸທັງຫລາຍ ໄດ້ແກ່ ອັນພິກສຸເຫລົ່າອື່ນ

ອທິບາຍວ່າ ພິກສຸຜູ້ໄດ້ເຫັນ ຜູ້ໄດ້ຍິນເພິງວ່າກ່າວຕັກເຕືອນພິກສຸຜູ້ປະທຸສຮ້າຍຕະກູນວ່າ "ທ່ານຢ່າເວົ້າ ຢ່າງນັ້ນ ພິກສຸທັງຫລາຍບໍ່ລຳອຽງເພາະຄວາມພໍໃຈ ບໍ່ລຳອຽງເພາະຄວາມຂັດເຄືອງ ບໍ່ລຳອຽງເພາະຄວາມຫລົງ ບໍ່ລຳອຽງເພາະຄວາມຢ້ານ ທ່ານປຣະທຸສຮ້າຍຕະກູນ ປະພຶດຊົ່ວຊາມ ຄວາມປະພຶດຊົ່ວຊາມຂອງທ່ານ ເຂົາໄດ້ເຫັນແລະໄດ້ຍິນກັນທົ່ວ ຕະກູນທັງຫລາຍທີ່ທ່ານປະທຸສຮ້າຍ ເຂົາກໍໄດ້ເຫັນແລະໄດ້ຍິນກັນທົ່ວ ທ່ານຈົ່ງອອກຈາກອາວາສນີ້ ຢ່າຢູ່ທີ່ນີ້" ເພິງວ່າກ່າວຕັກເຕືອນແມ່ນຄັ້ງທີ ໒ ເພິງວ່າກ່າວຕັກເຕືອນທ່ານແມ່ນຄັ້ງທີ ໓ ຖ້າທ່ານສລະໄດ້ ນັ້ນເປັນກາຣດີ ຖ້າບໍ່ສລະ ຕ້ອງອາບັຕິທຸກກຕ ພິກສຸທັງຫລາຍໄດ້ຍິນແລ້ວບໍ່ວ່າກ່າວຕັກເຕືອນ ຕ້ອງອາບັຕິທຸກກຕ ພິກສຸນັ້ນອັນພິກສຸທັງຫລາຍເພິງຄຸມຕົວມາສູ່ທ່າມກາງສົງຂ໌ວ່າກ່າວຕັກເຕືອນວ່າ "ທ່ານຢ່າເວົ້າຢ່າງນັ້ນ ພິກສຸທັງຫລາຍບໍ່ລຳອຽງເພາະຄວາມພໍໃຈ ບໍ່ລຳອຽງເພາະຄວາມຂັດເຄືອງ ບໍ່ລຳອຽງເພາະຄວາມ ຫລົງ ບໍ່ລຳອຽງເພາະຄວາມຢ້ານ ທ່ານປະທຸສຮ້າຍຕະກູນ ປະພຶດຊົ່ວຊາມຄວາມປະພຶດຊົ່ວຊາມຂອງທ່ານ ເຂົາໄດ້ເຫັນແລະໄດ້ຍິນກັນທົ່ວ ຕະກູນທັງຫລາຍທີ່ທ່ານປະທຸສຮ້າຍ ເຂົາກໍໄດ້ເຫັນແລະໄດ້ຍິນກັນທົ່ວ ທ່ານຈົ່ງອອກຈາກອາວາສນີ້ ຢ່າຢູ່ທີ່ນີ້" ເພິງວ່າກ່າວຕັກເຕືອນທ່ານແມ່ນຄັ້ງທີ ໒ ເພິງວ່າກ່າວຕັກເຕືອນທ່ານແມ່ນຄັ້ງທີ ໓ ຖ້າທ່ານສລະໄດ້ ນັ້ນເປັນກາຣດີ ຖ້າບໍ່ສລະ ຕ້ອງອາບັຕິທຸກກຕ ສົງຂ໌ເພິງສວດສມນຸພາສນ໌ທ່ານ

## ວິທີສວດສມນຸພາສນ໌ ແລະກັມວາຈາສວດສມນຸພາສນ໌

ສົງຄ໌ເພິງສວດສມນຸພາສນ໌ພິກສຸນັ້ນຢ່າງນີ້ ຄື ພິກສຸຜູ້ສລາດສາມາດເພິງປະກາດໃຫ້ສົງຄ໌ຊາບວ່າ

[໔໓໗] ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ພິກສຸຊື່ນີ້ ຖືກສົງຄ໌ທຳປັພພາຊນີຍກັມແລ້ວໃສ່ຄວາມພິກສຸທັງຫລາຍວ່າມີຄວາມລຳອຽງເພາະຄວາມພໍໃຈ ມີຄວາມລຳອຽງເພາະຄວາມຂັດເຄືອງ ມີຄວາມລຳອຽງເພາະຄວາມຫລົງ ມີຄວາມລຳອຽງເພາະຄວາມຢ້ານພິກສຸນັ້ນບໍ່ຍອມສລະເຣື້ອງນັ້ນ ຖ້າສົງຄ໌ພ້ອມກັນແລ້ວກໍເພິງສວດສມນຸພາສນ໌ພິກສຸຊື່ນີ້ ເພື່ອໃຫ້ສລະເຣື້ອງນັ້ນ ນີ້ເປັນຍັຕຕິ ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ພິກສຸຊື່ນີ້ຖືກສົງຄ໌ທຳປັພພາຊນີຍກັມແລ້ວໃສ່ຄວາມພິກສຸທັງຫລາຍວ່າ ມີຄວາມລຳອຽງເພາະຄວາມພໍໃຈ ມີຄວາມລຳອຽງເພາະຄວາມຂັດເຄືອງ ມີຄວາມລຳອຽງເພາະຄວາມຫລົງ ມີຄວາມລຳອຽງເພາະຄວາມຢ້ານພິກສຸນັ້ນບໍ່ຍອມສລະເຣື້ອງນັ້ນ ສົງຄ໌ສວດສມນຸພາສນ໌ທ່ານເພື່ອໃຫ້ສລະເຣື້ອງນັ້ນ ທ່ານຮູບໃດເຫັນດ້ວຍກັບການສວດສມນຸພາສນ໌ພິກສຸຊື່ນີ້ ເພື່ອໃຫ້ສລະເຣື້ອງນັ້ນ ທ່ານຮູບນັ້ນເພິງນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນເພິງທັກທ້ວງ ຂ້າພະເຈົ້າກ່າວຄວາມນີ້ແມ່ນຄັ້ງທີ ໒ ຯລຯ ຂ້າພະເຈົ້າກ່າວຄວາມນີ້ແມ່ນຄັ້ງທີ ໓ ວ່າ ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ຯລຯ ທ່ານຮູບນັ້ນເພິງທັກທ້ວງພິກສຸຊື່ນີ້ສົງຄ໌ສວດສມນຸພາສນ໌ແລ້ວເພື່ອ ໃຫ້ສລະເຣື້ອງນັ້ນ ສົງຄ໌ເຫັນດ້ວຍ ເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືເອົາຄວາມນິ່ງນັ້ນເປັນມຕິຢ່າງນີ້

[໔໓໘] ຈົບຍັຕຕິ ຕ້ອງອາບັຕິທຸກກຕ ຈົບກັມວາຈາ ໒ ຄັ້ງ ຕ້ອງອາບັຕິຖຸລລັຈຈັຍ ຈົບກັມວາຈາຄັ້ງສຸດທ້າຍ ຕ້ອງອາບັຕິສັງຄາທິເສສ ເມື່ອທ່ານຕ້ອງອາບັຕິສັງຄາທິເສສ ອາບັຕິທຸກກຕ(ທີ່ຕ້ອງ) ເພາະຍັຕຕິ ອາບັຕິຖຸລ ລັຈຈັຍ(ທີ່ຕ້ອງ) ເພາະກັມວາຈາ ໒ ຄັ້ງ ຍ່ອມຣະງັບໄປ

ຄຳວ່າ ເປັນສັງຄາທິເສສ ຄວາມວ່າ ສຳລັບອາບັຕິນັ້ນ ສົງຄ໌ເທົ່ານັ້ນໃຫ້ປຣິວາສ ຊັກເຂົ້າຫາອາບັຕິເດີມ ໃຫ້ມານັຕແລະຣຽກເຂົ້າຫມູ່ ຄນະທຳບໍ່ໄດ້ ພິກສຸຮູບດຽວກໍທຳບໍ່ໄດ້ ສະນັ້ນ ຈຶ່ງຕຣັສວ່າ "ເປັນສັງຄາທິເສສ"

ຄຳວ່າ ເປັນສັງຄາທິເສສ ນັ້ນ ເປັນການຂນານນາມ ເປັນຄຳຮຽກຫມວດອາບັຕິນັ້ນ ໂດຍອ້ອມນັ້ນເອງ ເພາະເຫຕຸນັ້ນ ພຣະຜູ້ມີພຣະພາຄຈຶ່ງຕຣັສຮຽກວ່າ "ເປັນສັງຄາທິເສສ"

## ບທພາຊນີຍ໌

[໔໔໐] ກັມທີ່ທຳຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳຖືກຕ້ອງ ບໍ່ສລະ ຕ້ອງອາບັຕິສັງຄາທິເສສ ກັມທີ່ທຳຖືກຕ້ອງ ພິກສຸບໍ່ແນ່ໃຈ ບໍ່ສລະ ຕ້ອງອາບັຕິສັງຄາທິເສສ

ກັມທີ່ທຳຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳບໍ່ຖືກຕ້ອງ ບໍ່ສລະ ຕ້ອງອາບັຕິສັງຂາທິເສສ
ກັມທີ່ທຳບໍ່ຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳຖືກຕ້ອງ ຕ້ອງອາບັຕິທຸກກາຕ
ກັມທີ່ທຳບໍ່ຖືກຕ້ອງ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກາຕ
ກັມທີ່ທຳບໍ່ຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳບໍ່ຖືກຕ້ອງ ຕ້ອງອາບັຕິທຸກກາຕ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ສັງຂາທິເສສກັນຫ໌] ໑໓. ກຸລທູສກສິກຂາບົທ ບົທສຣຸປ
ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໔໔໑] ໑. ພິກສຸຍັງບໍ່ຖືກສວດສມນຸພາສນ໌

໒. ພິກສຸຜູ້ຍອມສລະ

໓. ພິກສຸວິກົລຈິຕ

໔. ພິກສຸຕົ້ນບັນຍັຕ

ກຸລທູສກສິກຂາບົທທີ ໑໓ ຈົບ

## ບົທສຣຸປ

[໔໔໒] ທ່ານທັງຫລາຍ ຫັມຄືສັງຂາທິເສສ ໑໓ ສິກຂາບົທ ຂ້າພະເຈົ້າຍົກຂຶ້ນສະແດງແລ້ວ ຄື ໙ ສິກຂາບົທແຣກຕ້ອງອາບັຕິໃນຂນະທີ່ລ່ວງລະເມີດທີດຽວ ໔ ສິກຂາບົທຫລັງຕ້ອງອາບັຕິເມື່ອສວດສມນຸພາສນ໌ຄົບ ໓ ຄັ້ງ ພິກສຸຕ້ອງອາບັຕິຂໍ້ໃດຂໍ້ນຶ່ງແລ້ວ ຮູ້ຢູ່ແຕ່ປກປິດໄວ້ສິ້ນຈຳນວນວັນເທົ່າໃດ ພິກສຸນັ້ນເພິງຢູ່ປຣິວາສດ້ວຍຄວາມບໍ່ປຣາຖນາສິ້ນວັນເທົ່ານັ້ນ ພິກສຸຢູ່ປຣິວາສແລ້ວຕ້ອງປະພຶດວັຕຣເພື່ອມານັຕສຳລັບພິກສຸເພີ່ມຂຶ້ນອີກ ໖

ຣາຕຣີ ພິກສຸຜູ້ປະພຶດມານັຕແລ້ວຖືກສົງຂ໌ຮຽກເຂົ້າຫມູ່ໃນສີມາມີພິກສຸສົງຂ໌ ໒໐ ຮູບ ຖ້າພິກສຸສົງຂ໌ ໒໐ ຮູບ ຂາດໄປແມ່ນພຽງ ໑ ຮູບ ຮຽກພິກສຸນັ້ນເຂົ້າຫມູ່ ພິກສຸນັ້ນບໍ່ເປັນອັນສົງຂ໌ຮຽກເຂົ້າຫມູ່ ແລະພິກສຸເຫລົ່ານັ້ນຄວຣຖືກຕຳຫນິ ນີ້ເປັນການທຳທີ່ສົມຄວຣໃນກັມນັ້ນ ຂ້າພະເຈົ້າຂໍຖາມທ່ານທັງຫລາຍໃນຫັມຄືສັງຂາທິເສສ ໑໓ ສິກຂາບົທນັ້ນວ່າ "ທ່ານທັງຫລາຍບໍຣິສຸດຫ໌ແລ້ວຫລື"

ຂ້າພະເຈົ້າຂໍຖາມເປັນຄັ້ງທີ ໒ ວ່າ "ທ່ານທັງຫລາຍບໍຣິສຸດທ໌ແລ້ວຫລື"
ຂ້າພະເຈົ້າຂໍຖາມເປັນຄັ້ງທີ ໓ ວ່າ "ທ່ານທັງຫລາຍບໍຣິສຸດທ໌ແລ້ວຫລື"
ທ່ານທັງຫລາຍບໍຣິສຸດທ໌ແລ້ວໃນທັມຄືສັງຂາທິເສສ ໑໓ ສິກຂາບົທນີ້ ເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືຄວາມນິ່ງນັ້ນເປັນມຕິຢ່າງນີ້

ເຕຣສກັນທ໌ ຈົບ

## ພຣະວິນັຍປິດົກ ມຫາວິພັງຄ໌ [໒. ສັງຂາທິເສສກັນທ໌] ໑໓. ກຸລທູສກສິກຂາບົທ ຣວມສິກຂາບົທທີ່ມີໃນສັງຂາທິເສສກັນທ໌

### ຣວມສິກຂາບົທທີ່ມີໃນສັງຂາທິເສສກັນທ໌

ສັງຂາທິເສສກັນທ໌ມີ ໑໓ ສິກຂາບົທ ຄື
໑. ສຸກກວິສັຕຖິສິກຂາບົທ ວ່າດ້ວຍການຈົງໃຈທຳນ້ຳອສຸຈິໃຫ້ເຄື່ອນ
໒. ກາຍສັງສັຄຄສິກຂາບົທ ວ່າດ້ວຍການຖືກຕ້ອງກາຍກັບມາຕຸຄາມ
໓. ທຸຕຖຸລລວາຈາສິກຂາບົທ ວ່າດ້ວຍການເວົ້າກັ້ງວຍິງ
໔. ອັຕຕກາມປາຣິຈຣິຍສິກຂາບົທ ວ່າດ້ວຍການໃຫ້ບຳເຣີຄວາມໃຄ່ຂອງຕົນ
໕. ສັຍຈຣິຕສິກຂາບົທ ວ່າດ້ວຍການຊັກສື່ອ
໖. ກຸຕິການສິກຂາບົທ ວ່າດ້ວຍການກໍ່ສ້າງກຸຕິ
໗. ວິຫານການສິກຂາບົທ ວ່າດ້ວຍການສ້າງວິຫານ
໘. ປຖມທຸຕຖໂທສສິກຂາບົທ ວ່າດ້ວຍພິກສຸຂັດເຄືອງມີໂທສະ ສິກຂາບົທທີ ໑
໙. ທຸຕິຍທຸຕຖໂທສສິກຂາບົທ ວ່າດ້ວຍພິກສຸຂັດເຄືອງມີໂທສະ ສິກຂາບົທທີ ໒
໑໐. ສັງຂເພທສິກຂາບົທ ວ່າດ້ວຍການທຳສົງຂ໌ໃຫ້ແຕກກັນ
໑໑. ສັງຂເພທານຸວັຕຕກສິກຂາບົທ ວ່າດ້ວຍພິກສຸປະພຶດຕາມແລະກ່າວສນັບສນຸນພິກສຸຜູ້ທຳສົງຂ໌ໃຫ້ແຕກກັນ
໑໒. ທຸພພຈສິກຂາບົທ ວ່າດ້ວຍພິກສຸເປັນຄົນວ່າຍາກ
໑໓. ກຸລທູສກສິກຂາບົທ ວ່າດ້ວຍພິກສຸຜູ້ປະທຸສຮ້າຍຕະກູນ

ສັງຄາທິເສສກັນທ໌ ຈົບ

## ພຣະວິນັຍປິດົກ ມຫາວິພັງຄ໌ [໓. ອນິຍຕກັນທ໌] ໑. ປຖມອນິຍຕສິກຂາບົທ ນິທານວັຕຖຸ

## ໓. ອນິຍຕກັນທ໌

ທ່ານທັງຫລາຍ ທັມຄືອນິຍຕ ໒ ສິກຂາບົທເຫລົ່ານີ້ ມາເຖິງອາຣະທີ່ຈະຍົກຂຶ້ນສະແດງເປັນຂໍ້ ໆ ຕາມລຳດັບ

### ໑. ປຖມອນິຍຕສິກຂາບົທ
### ວ່າດ້ວຍການນັ່ງໃນທີ່ລັບຕາກັບຍິງສອງຕໍ່ສອງ
### ເຣື້ອງພຣະອຸທາຍີ

[໔໔໓] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ທ່ານພຣະອຸທາຍີເປັນພຣະປະຈຳຕະກູນໃນກຸງສາວັຕຖີ ໄປມາຫາສູ່ຕະກູນທັງຫລາຍ ສມັຍນັ້ນ ຍິງສາວຕະກູນອຸປັຕຖາກຂອງທ່ານພຣະອຸທາຍີອັນມາຣດາບິດາໄດ້ຍົກໃຫ້ຊາຍໜຸ່ມຕະກູນນຶ່ງ ເວລາເຊົ້າມື້ນຶ່ງ ທ່ານພຣະອຸທາຍີຄອງອັນຕຣວາສກ ຖືບາຕຣແລະຈີວອນໄປທີ່ຕະກູນນັ້ນ ຄັນເຖິງແລ້ວຖາມຊາວບ້ານວ່າ “ຍິງສາວຊື່ນີ້ໄປໃສ” ຊາວບ້ານຕອບວ່າ “ເຂົາຍົກໃຫ້ຊາຍໜຸ່ມຕະກູນພຸ້ນໄປແລ້ວ ຂນ້ອຍ” ຕະກູນນັ້ນກໍເປັນອຸປັຕຖາກຂອງທ່ານພຣະອຸທາຍີ ທ່ານຈຶ່ງໄປທີ່ນັ້ນຖາມວ່າ “ຍິງສາວຊື່ນີ້ຢູ່ໃສ” ຊາວບ້ານຕອບວ່າ “ນາງນັ່ງຢູ່ໃນຫ້ອງຂນ້ອຍ” ທ່ານພຣະອຸທາຍີເຂົ້າໄປຫາຍິງສາວນັ້ນ ນັ່ງເທິງອາສນະທີ່ກຳບັງໃນທີ່ລັບພໍຈະທຳການໄດ້ເຈຣຈາກ່າວທັມເຫມາະແກ່ກາລກັບຍິງສາວນັ້ນສອງຕໍ່ສອງ

### ນາງວິສາຂາມິຄາຣມາຣດາຕຳໜິພຣະອຸທາຍີ

ສມັຍນັ້ນ ນາງວິສາຂາມິຄາຣມາຣດາ ມີບຸຕຣຫລານມາກ ມີບຸຕຣຫລານລ້ວນບໍ່ມີໂຣຄ ໄດ້ຮັບຍົກຍ້ອງວ່າເປັນມິ່ງມຸງຄຸລ ພວກຊາວບ້ານເຊີນນາງວິສາຂາໄປບໍຣິໂພຄເປັນຄົນທຳອິດໃນງານບຸນ ງານມຫໍຣສົພ ງານສລອງ ນາງວິສາຂາມິຄາຣມາຣດາໄດ້ຮັບເຊີນໄປສູ່ຕະກູນນັ້ນ ນາງໄດ້ເຫັນທ່ານພຣະອຸທາຍີນັ່ງເທິງອາສນະທີ່ກຳບັງໃນທີ່ລັບພໍຈະທຳການໄດ້ກັບຍິງສາວ ຄັນເຫັນແລ້ວຈຶ່ງກ່າວກັບ

ທ່ານພຣະອຸທາຍີວ່າ "ພຣະຄຸນເຈົ້າ ການທີ່ທ່ານນັ່ງເທິງອາສນະທີ່ກໍາບັງໃນທີ່ລັບ ພໍຈະທໍາການໄດ້ກັບມາຕຸຄາມສອງຕໍ່ສອງເຊັ່ນນີ້ ບໍ່ເຫມາະ ບໍ່ສົມຄວນ ທ່ານບໍ່ປຣາຖນາດ້ວຍທັມນັ້ນກໍແມ່ນແທ້ເຖິງຢ່າງນັ້ນ ຊາວບ້ານທີ່ຍັງບໍ່ເຫລື້ອມໃສກໍເຮັດໃຫ້ ເຊື່ອຍາກ" ທ່ານພຣະອຸທາຍີ ແມ່ນຖືກນາງວິສາຂາວ່າກ່າວຕັກເຕືອນກໍບໍ່ເຊື່ອ ນາງວິສາຂາຈຶ່ງອອກໄປບອກເຣື້ອງນັ້ນໃຫ້ພິກສຸທັງຫລາຍຊາບ ບັນດາພິກສຸຜູ້ມັກນ້ອຍສັນໂດສ ຯລຯ ພາກັນຕໍາຫນິ ປະນາມໂພນທະນາວ່າ "ຈັ່ງໃດທ່ານພຣະອຸທາຍີຈຶ່ງນັ່ງເທິງອາສນະທີ່ກໍາບັງໃນທີ່ລັບພໍຈະທໍາການໄດ້ກັບມາຕຸຄາມສອງຕໍ່ສອງລະ" ຄັນພິກສຸທັງຫລາຍຕໍາຫນິທ່ານພຣະອຸທາຍີໂດຍປະການຕ່າງໆ ແລ້ວຈຶ່ງນໍາເຣື້ອງນີ້ຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

## ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລໍາດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະອຸທາຍີວ່າ "ອຸທາຍີ ຊາບວ່າ ທ່ານນັ່ງເທິງອາສນະທີ່ກໍາບັງໃນທີ່ລັບພໍຈະທໍາການໄດ້ກັບມາຕຸຄາມສອງຕໍ່ສອງ ແມ່ນແທ້ບໍ" ທ່ານທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕໍາຫນິວ່າ "ໂມຄບຸຣຸສ ການກະທໍາຂອງທ່ານບໍ່ສົມຄວນ ບໍ່ຄ້ອຍຕາມ ຯລຯ ໂມຄບຸຣຸສ ຈັ່ງໃດທ່ານຈຶ່ງນັ່ງເທິງອາສນະທີ່ກໍາບັງໃນທີ່ລັບພໍຈະທໍາການໄດ້ກັບມາຕຸຄາມ ສອງຕໍ່ສອງລະ ໂມຄບຸຣຸສ ການກະທໍາຢ່າງນີ້ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງ ດັ່ງນີ້

## ພຣະບັນຍັດ

ບັນດາອາບັຕິ ໓ ຢ່າງ ຄື ປາຣາຊິກ ສັງຄາທິເສສ ຫລືປາຈິຕຕີຍ໌ ອີກຢ່າງນຶ່ງ ອຸບາສິກາຜູ້ມີວາຈາເຊື່ອຖືໄດ້ນັ້ນ ກ່າວໂທສດ້ວຍອາບັຕິໃດ ພິກສຸນັ້ນເພິ່ງຖືກປັບດ້ວຍອາບັຕິນັ້ນ ອາບັຕິນີ້ຊື່ວ່າອນິຍຕ

## ເຣື້ອງພຣະອຸທາຍີ ຈົບ

## ສິກຂາບົທວິພັງຄ໌

[໔໔໕] ຄຳວ່າ ກໍ...ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ...ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ທີ່ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ມາຕຸຄາມ ໄດ້ແກ່ ຍິງມນຸສຍ໌ ບໍ່ແມ່ນນາງຍັກສ໌ ບໍ່ແມ່ນນາງເຜດ ບໍ່ແມ່ນສັຕວ໌ເດັຽຣະສານໂຕແມ່ ຍິງມນຸສຍ໌ນັ້ນໂດຍທີ່ສຸດຈົນເມື່ອເດັກຍິງຊຶ່ງເກີດໃນວັນນັ້ນ ຍິງໃຫຍ່ກວ່ານີ້ບໍ່ຕ້ອງກ່າວເຖິງ

ຄຳວ່າ ກັບ ຄື ໂດຍຄວາມເປັນອັນດຽວກັນ

ຄຳວ່າ ສອງຕໍ່ສອງ ໄດ້ແກ່ ພິກສຸກັບມາຕຸຄາມ

ທີ່ຊື່ວ່າ ທີ່ລັບ ໄດ້ແກ່ ທີ່ລັບຕາແລະລັບຫູ ທີ່ຊື່ວ່າ ທີ່ລັບຕາ ຫມາຍເຖິງ ທີ່ຊຶ່ງເມື່ອບຸຄຄົລຂຍິບຕາ ຍັກຄິ້ວຫລືງຶກສີສະຂຶ້ນ ໃຜໆ ກໍບໍ່ສາມາດແລເຫັນໄດ້ ທີ່ຊື່ວ່າ ທີ່ລັບຫູ ຫມາຍເຖິງ ທີ່ຊຶ່ງບໍ່ມີໃຜສາມາດໄດ້ຍິນຖ້ອຍຄຳທີ່ເວົ້າກັນຕາມປົກຕິໄດ້

ອາສນະທີ່ຊື່ວ່າ ທີ່ກຳບັງ ຄື ອາສນະທີ່ກຳບັງດ້ວຍຝາ ບານປະຕູ ເສື່ອລຳແພນ ມ່ານຕົ້ນໄມ້ ເສົາຫລືພ້ອມຢ່າງໃດຢ່າງນຶ່ງ

ຄຳວ່າ ພໍຈະທຳກາຣໄດ້ ຄື ອາຈຈະເສພເມຖຸນທັມກັນໄດ້

ຄຳວ່າ ນັ່ງ ຫມາຍຄວາມວ່າ ເມື່ອມາຕຸຄາມນັ່ງ ພິກສຸນັ່ງໃກ້ຫລືນອນໃກ້ ເມື່ອພິກສຸນັ່ງ ມາຕຸຄາມນັ່ງໃກ້ຫລືນອນໃກ້ ຫລືນັ່ງທັງສອງຄົນ ຫລືນອນທັງສອງຄົນ

ທີ່ຊື່ວ່າ ມີວາຈາເຊື່ອຖືໄດ້ ຖື ຍິງຜູ້ບັນລຸຜົລ ຜູ້ຕຣັສຮູ້ທັມ ຜູ້ເຂົ້າໃຈສາສນາດີ

ຊື່ວ່າ ອຸບາສິກາ ໄດ້ແກ່ ຍິງຜູ້ເຖິງພຣະພຸທທເປັນສຣນະ ເຖິງພຣະທັມເປັນສຣນະ ເຖິງພຣະສົງຄ໌ເປັນສຣນະ

ຄຳວ່າ ໄດ້ເຫັນ ຄື ໄດ້ພົບ

ອຸບາສິກາມີວາຈາເຊື່ອຖືໄດ້ ກ່າວໂທສດ້ວຍອາບັຕິຢ່າງໃດຢ່າງນຶ່ງ ບັນດາອາບັຕິ ໓ ຢ່າງ ຄື ປາຣາຊິກ ສັງຄາທິເສສ ຫລືປາຈິຕຕິຍ໌ ພິກສຸຍອມຮັບກາຣນັ່ງ ເພິ່ງຖືກປັບ ອາບັຕິຢ່າງໃດຢ່າງນຶ່ງບັນດາອາບັຕິ ໓ ຢ່າງ ຄື ປາຣາຊິກ ສັງຄາທິເສສ ຫລືປາຈິຕຕິຍ໌ ອີກປະກາຣນຶ່ງ ອຸບາສິກາຜູ້ມີວາຈາເຊື່ອຖືນັ້ນກ່າວໂທສດ້ວຍອາບັຕິໃດ ພິກສຸນັ້ນເພິ່ງຖືກປັບດ້ວຍອາບັຕິນັ້ນ

## ບິຫພາຊນີຍ໌
## ປະຕິຍານຕກຣນະ ໔
## ເຫັນກຳລັງນັ່ງເສພເມຖຸນ

[໔໔໓] ຖ້າອຸບາສິການັ້ນກ່າວຢ່າງນີ້ວ່າ "ຂະນ້ອຍເຫັນພຣະຄຸນເຈົ້າກຳລັງນັ່ງເສພເມຖຸນກັບມາຕຸຄາມ" ແລະພິກສຸນັ້ນກໍຍອມຮັບການນັ່ງນັ້ນ ເພິງປັບຕາມອາບັຕິ ຖ້າອຸບາສິການັ້ນກ່າວຢ່າງນີ້ວ່າ "ຂະນ້ອຍເຫັນພຣະຄຸນເຈົ້າກຳລັງນັ່ງເສພເມຖຸນກັບມາຕຸຄາມ" ຖ້າພິກສຸນັ້ນກ່າວຢ່າງນີ້ວ່າ "ອາຕມານັ່ງແມ່ນແທ້ແຕ່ບໍ່ໄດ້ເສພເມຖຸນຫັມ" ເພິງປັບອາບັຕິເພາະນັ່ງ

ຖ້າອຸບາສິການັ້ນກ່າວຢ່າງນີ້ວ່າ "ຂະນ້ອຍເຫັນພຣະຄຸນເຈົ້າກຳລັງນັ່ງເສພເມຖຸນກັບມາຕຸຄາມ" ຖ້າພິກສຸນັ້ນກ່າວຢ່າງນີ້ວ່າ "ອາຕມາບໍ່ໄດ້ນັ່ງ ແຕ່ນອນ" ເພິງປັບອາບັຕິເພາະນອນ

ຖ້າອຸບາສິການັ້ນກ່າວຢ່າງນີ້ວ່າ "ຂະນ້ອຍເຫັນພຣະຄຸນເຈົ້າກຳລັງນັ່ງເສພເມຖຸນກັບມາຕຸຄາມ" ຖ້າພິກສຸນັ້ນກ່າວຢ່າງນີ້ວ່າ "ອາຕມາບໍ່ໄດ້ນັ່ງ ແຕ່ຢືນຢູ່" ບໍ່ເພິງປັບອາບັຕິ

## ເຫັນກຳລັງນອນເສພເມຖຸນ

[໔໔໗] ຖ້າອຸບາສິການັ້ນກ່າວຢ່າງນີ້ວ່າ "ຂະນ້ອຍເຫັນພຣະຄຸນເຈົ້າກຳລັງນອນເສພເມຖຸນກັບມາຕຸຄາມ" ແລະພິກສຸນັ້ນຍອມຮັບການນອນນັ້ນ ເພິງປັບຕາມອາບັຕິ ຖ້າອຸບາສິການັ້ນກ່າວຢ່າງນີ້ວ່າ "ຂະນ້ອຍເຫັນພຣະຄຸນເຈົ້າກຳລັງນອນເສພເມຖຸນກັບມາຕຸຄາມ" ຖ້າພິກສຸນັ້ນກ່າວຢ່າງນີ້ວ່າ "ອາຕມານອນແມ່ນແທ້ແຕ່ບໍ່ໄດ້ເສພເມຖຸນ" ເພິງປັບອາບັຕິເພາະນອນ

ຖ້າອຸບາສິການັ້ນກ່າວຢ່າງນີ້ວ່າ "ຂະນ້ອຍເຫັນພຣະຄຸນເຈົ້າກຳລັງນອນເສພເມຖຸນກັບມາຕຸຄາມ" ຖ້າພິກສຸນັ້ນກ່າວຢ່າງນີ້ວ່າ "ອາຕມາບໍ່ໄດ້ນອນ ແຕ່ນັ່ງຢູ່" ເພິງປັບອາບັຕິເພາະນັ່ງ

ຖ້າອຸບາສິການັ້ນກ່າວຢ່າງນີ້ວ່າ "ຂະນ້ອຍເຫັນພຣະຄຸນເຈົ້າກຳລັງນອນເສພເມຖຸນກັບມາຕຸຄາມ" ຖ້າພິກສຸນັ້ນກ່າວຢ່າງນີ້ວ່າ "ອາຕມາບໍ່ໄດ້ນອນ ແຕ່ຢືນຢູ່" ບໍ່ເພິງປັບອາບັຕິ

## ເຫັນກຳລັງນັ່ງຖືກຕ້ອງກາຍ

[໔໔໘] ຖ້າອຸບາສິການັ້ນກ່າວຢ່າງນີ້ວ່າ "ຂະນ້ອຍເຫັນພຣະຄຸນເຈົ້າກຳລັງນັ່ງຖືກຕ້ອງກາຍກັບມາຕຸຄາມ" ແລະພິກສຸນັ້ນຍອມຮັບການນັ່ງນັ້ນ ເພິງປັບຕາມອາບັຕິ

ຖ້າອຸບາສິການັ້ນກ່າວຢ່າງນີ້ວ່າ "ຂະນ້ອຍເຫັນພຣະຄຸນເຈົ້າກຳລັງນັ່ງຖືກຕ້ອງກາຍກັບມາຕຸຄາມ" ຖ້າ

ພິກສຸນັ້ນກ່າວຢ່າງນີ້ວ່າ "ອາຕມານັ່ງແມ່ນແທ້ແຕ່ບໍ່ໄດ້ຖືກຕ້ອງກາຍ" ເພິງປັບອາບັຕິເພາະການັ່ງ ຯລຯ "ອາຕມາບໍ່ໄດ້ນັ່ງ ແຕ່ນອນຢູ່" ເພິງປັບອາບັຕິເພາະນອນ ຯລຯ "ອາຕມາບໍ່ໄດ້ນັ່ງ ແຕ່ຢືນຢູ່" ບໍ່ເພິງປັບອາບັຕິ

## ເຫັນກຳລັງນອນຖືກຕ້ອງກາຍ

ຖ້າອຸບາສິການັ້ນກ່າວຢ່າງນີ້ວ່າ "ຂະນ້ອຍເຫັນພຣະຄຸນເຈົ້າກຳລັງນອນຖືກຕ້ອງກາຍກັບມາຕຸຄາມ" ແລະພິກສຸນັ້ນຍອມຮັບການນອນນັ້ນ ເພິງປັບຕາມອາບັຕິ ຖ້າອຸບາສິການັ້ນກ່າວຢ່າງນີ້ວ່າ "ຂະນ້ອຍເຫັນພຣະຄຸນເຈົ້າກຳລັງນອນຖືກຕ້ອງກາຍກັບມາຕຸຄາມ" ຖ້າພິກສຸກ່າວຢ່າງນີ້ວ່າ "ອາຕມານອນແມ່ນແທ້ແຕ່ບໍ່ໄດ້ຖືກຕ້ອງກາຍ" ເພິງປັບອາບັຕິເພາະນອນ ຯລຯ "ອາຕມາບໍ່ໄດ້ນອນແຕ່ນັ່ງຢູ່" ເພິງປັບອາບັຕິເພາະນັ່ງ ຯລຯ "ອາຕມາບໍ່ໄດ້ນອນ ແຕ່ຢືນຢູ່" ບໍ່ເພິງປັບອາບັຕິ

## ເຫັນນັ່ງໃນທີ່ລັບ

[໔໔໙] ຖ້າອຸບາສິການັ້ນກ່າວຢ່າງນີ້ວ່າ "ຂະນ້ອຍເຫັນພຣະຄຸນເຈົ້ານັ່ງເທິງອາສນະ ທີ່ກຳບັງໃນທີ່ລັບພໍຈະທຳການໄດ້ກັບມາຕຸຄາມສອງຕໍ່ສອງ" ແລະພິກສຸນັ້ນຍອມຮັບການັ່ງນັ້ນ ເພິງປັບອາບັຕິເພາະນັ່ງ ຯລຯ "ອາຕມາບໍ່ໄດ້ນັ່ງ ແຕ່ນອນຢູ່" ເພິງປັບອາບັຕິ ເພາະນອນ ຯລຯ "ອາຕມາບໍ່ໄດ້ນັ່ງ ແຕ່ຢືນຢູ່" ບໍ່ເພິງປັບອາບັຕິ

## ເຫັນນອນໃນທີ່ລັບ

[໔໕໐] ຖ້າອຸບາສິການັ້ນກ່າວຢ່າງນີ້ວ່າ "ຂະນ້ອຍເຫັນພຣະຄຸນເຈົ້ານອນເທິງອາສນະທີ່ກຳບັງໃນທີ່ລັບພໍຈະທຳການໄດ້ກັບມາຕຸຄາມສອງຕໍ່ສອງ" ແລະພິກສຸນັ້ນຍອມຮັບການນອນນັ້ນ ເພິງປັບອາບັຕິເພາະນອນ ຯລຯ "ອາຕມາບໍ່ໄດ້ນອນ ແຕ່ນັ່ງຢູ່" ເພິງປັບອາບັຕິເພາະນັ່ງ ຯລຯ "ອາຕມາບໍ່ໄດ້ນອນແຕ່ຢືນຢູ່" ບໍ່ເພິງປັບອາບັຕິ ຄຳວ່າ ອນິຍຕ ຄື ບໍ່ແນ່ວ່າຈະເປັນປາຣາຊິກ ເປັນສັງຊາທິເສສ ຫລືເປັນປາຈິຕຕີຍ໌

[໔໕໑] ພິກສຸຍອມຮັບການໄປ ຍອມຮັບການັ່ງ ຍອມຮັບອາບັຕິ ເພິງປັບຕາມອາບັຕິ

ພິກສຸຍອມຮັບການໄປ ບໍ່ຍອມຮັບການນັ່ງ ຍອມຮັບອາບັຕິ ເພິ່ງປັບຕາມອາບັຕິ
ພິກສຸຍອມຮັບການໄປ ຍອມຮັບການນັ່ງ ບໍ່ຍອມຮັບອາບັຕິ ເພິ່ງປັບອາບັຕິເພາະນັ່ງ
ພິກສຸຍອມຮັບການໄປ ບໍ່ຍອມຮັບການນັ່ງ ບໍ່ຍອມຮັບອາບັຕິ ບໍ່ເພິ່ງປັບອາບັຕິ
ພິກສຸບໍ່ຍອມຮັບການໄປ ຍອມຮັບການນັ່ງ ຍອມຮັບອາບັຕິ ເພິ່ງປັບຕາມອາບັຕິ
ພິກສຸບໍ່ຍອມຮັບການໄປ ບໍ່ຍອມຮັບການນັ່ງ ຍອມຮັບອາບັຕິ ເພິ່ງປັບຕາມອາບັຕິ
ພິກສຸບໍ່ຍອມຮັບການໄປ ຍອມຮັບການນັ່ງ ບໍ່ຍອມຮັບອາບັຕິ ເພິ່ງປັບອາບັຕິເພາະນັ່ງ
ພິກສຸບໍ່ຍອມຮັບການໄປ ບໍ່ຍອມຮັບການນັ່ງ ບໍ່ຍອມຮັບອາບັຕິ ບໍ່ເພິ່ງປັບອາບັຕິ

ປຖມອນິຍຕສິກຂາບົທ ຈົບ

## ໔. ທຸຕິຍອນິຍຕສິກຂາບົທ
## ວ່າດ້ວຍການນັ່ງໃນທີ່ລັບຫູກັບຍິງສອງຕໍ່ສອງ
## ເຣື້ອງພຣະອຸທາຍີ

[໔໕໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ທ່ານພຣະອຸທາຍີຄິດວ່າ “ພຣະຜູ້ມີພຣະພາຄຊົງຫ້າມການນັ່ງເທິງອາສນະທີ່ກຳບັງໃນທີ່ລັບພໍຈະທຳການໄດ້ກັບມາຕຸຄາມສອງຕໍ່ສອງ” ຈຶ່ງນັ່ງເຈຣຈາ ກ່າວທັມເໝາະແກ່ກາລກັບຍິງສາວຄົນເດີມ

### ນາງວິສາຂາມິຄາຣມາຣດາຕຳໜິພຣະອຸທາຍີ

ແມ່ນຄັ້ງທີ ໔ ນາງວິສາຂາມິຄາຣມາຣດາໄດ້ຮັບເຊີນໄປສູ່ຕະກູນນັ້ນ ໄດ້ເຫັນທ່ານພຣະອຸທາຍີນັ່ງໃນທີ່ລັບກັບຍິງສາວສອງຕໍ່ສອງ ຈຶ່ງກ່າວກັບທ່ານພຣະອຸທາຍີວ່າ “ພຣະຄຸນເຈົ້າ ການທີ່ທ່ານນັ່ງໃນທີ່ລັບກັບຍິງສາວເຊັ່ນນີ້ ບໍ່ເໝາະ ບໍ່ສົມຄວຣ ທ່ານບໍ່ປຣາຖນາເມຖຸນກໍຈິງ ເຖິງຢ່າງນັ້ນ ຊາວບ້ານທີ່ຍັງບໍ່ເຫລື້ອມໃສກໍຈະເຮັດໃຫ້ເຊື່ອຍາກ” ທ່ານພຣະອຸທາຍີຖືກນາງວິສາຂາວ່າກ່າວຕັກເຕືອນກໍບໍ່ເຊື່ອ ນາງວິສາຂາຈຶ່ງອອກໄປບອກເຣື້ອງນັ້ນໃຫ້ພິກສຸທັງຫລາຍຊາບ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ “ຈັ່ງໃດທ່ານພຣະອຸທາຍີຈຶ່ງນັ່ງໃນທີ່ລັບກັບຍິງສາວສອງຕໍ່

ສອງລະ” ຄັນພິກສຸທັງຫລາຍຕຳຫນິທ່ານພຣະອຸທາຍີໂດຍປະການຕ່າງໆ ແລ້ວຈຶ່ງນຳເຣື້ອງນີ້ຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຊ໌ບັນຍັຕສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຊ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະອຸທາຍີວ່າ “ອຸທາຍີ ຊາບວ່າ ທ່ານນັ່ງໃນທີ່ລັບກັບຍິງສາວສອງຕໍ່ສອງແມ່ນແທ້ບໍ” ທ່ານທູລຮັບວ່າ “ແມ່ນແທ້ພຣະພຸທທເຈົ້າຂ້າ” ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ “ໂມຂບຸຣຸສ ຈັ່ງໃດທ່ານຈຶ່ງນັ່ງໃນທີ່ລັບກັບຍິງສາວສອງຕໍ່ສອງລະ ໂມຂບຸຣຸສ ການກະທຳຢ່າງນີ້ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ” ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍ ຍົກສິກຂາບົທນີ້ຂຶ້ນສະແດງ ດັ່ງນີ້

ພຣະບັນຍັຕ

[໔໕໓] ກໍ ສຖານທີ່ບໍ່ແມ່ນອາສນະທີ່ກຳບັງ ບໍ່ພໍຈະທຳການໄດ້ ແຕ່ເປັນສຖານທີ່ພໍຈະເວົ້າກັງວມາຕຸຄາມດ້ວຍວາຈາຊົ່ວຫຍາບໄດ້ ກໍພິກສຸໃດນັ່ງເຫິງອາສນະເຊັ່ນນັ້ນ ໃນທີ່ລັບກັບມາຕຸຄາມສອງຕໍ່ສອງ ອຸບາສິກາມີວາຈາເຊື່ອຖືໄດ້ ໄດ້ເຫັນພິກສຸນັ່ງກັບມາຕຸຄາມນັ້ນແລ້ວກ່າວໂທສດ້ວຍອາບັຕິຢ່າງໃດຢ່າງນຶ່ງ ບັນດາອາບັຕິ ໒ ຢ່າງ

ຄື ສັງຂາທິເສສ ຫລືປາຈິຕຕີຍ໌ ພິກສຸຍອມຮັບການນັ່ງ ເພິງຖືກປັບດ້ວຍອາບັຕິຢ່າງໃດຢ່າງນຶ່ງ ບັນດາອາບັຕິ ໒ ຢ່າງ ຄື ສັງຂາທິເສສ ຫລືປາຈິຕຕີຍ໌ ອີກຢ່າງນຶ່ງ ອຸບາສິກາຜູ້ມີວາຈາເຊື່ອຖືໄດ້ນັ້ນກ່າວໂທສດ້ວຍອາບັຕິໃດ ພິກສຸນັ້ນເພິງຖືກປັບດ້ວຍອາບັຕິນັ້ນ ອາບັຕິນີ້ຊື່ວ່າ ອນິຍຕ

ເຣື້ອງພຣະອຸທາຍີ ຈົບ

ສິກຂາບົທວິພັງຄ໌

[໔໕໔] ຄຳວ່າ ກໍ ສຖານທີ່ບໍ່ແມ່ນອາສນະທີ່ກຳບັງ ອທິບາຍວ່າ ອາສນະເປີດເຜີຍຄືທີ່ບໍ່ໄດ້ກຳບັງດ້ວຍຝາ ບານປະຕູ ເສື່ອລຳແພນ ມ່ານບັງ ຕົ້ນໄມ້ ເສົາ ຫລືພ້ອມຢ່າງໃດຢ່າງນຶ່ງ

ຄຳວ່າ ບໍ່ພໍຈະທຳການໄດ້ ຄື ບໍ່ອາຈຈະເສພເມຖຸນກັນໄດ້

ຄຳວ່າ ແຕ່ເປັນສຖານທີ່ພໍຈະເວົ້າກັງວມາຕຸຄາມດ້ວຍວາຈາຊົ່ວຫຍາບໄດ້ ຄື ອາຈເວົ້າກັງວມາຕຸຄາມ

ດ້ວຍຄໍາຊົ່ວຫຍາບ

ຄໍາວ່າ ກໍ...ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສຮຽກວ່າ ກໍ...ໃດ

ຄໍາວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມໝາຍນີ້

ຄໍາວ່າ ເຫິງອາສນະເຊັ່ນນັ້ນ ຄື ເຫິງອາສນະເຫັນປານນັ້ນ

ທີ່ຊື່ວ່າ ມາຕຸຄາມ ໄດ້ແກ່ ຍິງມນຸສຍ໌ ບໍ່ແມ່ນນາງຍັກສ໌ ບໍ່ແມ່ນນາງເຜດ ບໍ່ແມ່ນສັຕວ໌ເດັຽຣະສານ ໂຕແມ່ ແຕ່ເປັນຍິງທີ່ຮູ້ດຽງສາ ສາມາດຮັບຮູ້ຖ້ອຍຄໍາສຸພາສິຕ ທຸພພາສິຕ ຄໍາຫຍາບແລະຄໍາສຸພາພ

ຄໍາວ່າ ກັບ ຄື ໂດຍຄວາມເປັນອັນດຽວກັນ

ຄໍາວ່າ ສອງຕໍ່ສອງ ໄດ້ແກ່ ພິກສຸກັບມາຕຸຄາມ

ທີ່ຊື່ວ່າ ທີ່ລັບ ໄດ້ແກ່ ທີ່ລັບຕາແລະລັບຫູ ທີ່ຊື່ວ່າ ທີ່ລັບຕາ ໝາຍເຖິງ ສຖານທີ່ຊຶ່ງເມື່ອບຸຄຄົລຂຍິບຕາ ຍັກຄິ້ວ ຫລືງຶກສີສະຂຶ້ນໃສໆ ກໍບໍ່ສາມາດເຫັນໄດ້ ທີ່ຊື່ວ່າ ທີ່ລັບຫູ ໝາຍເຖິງ ທີ່ຊຶ່ງບໍ່ມີໃຜສາມາດໄດ້ຍິນຖ້ອຍຄໍາ ທີ່ເວົ້າກັນຕາມປົກຕິໄດ້

ຄໍາວ່າ ນັ່ງ ໝາຍຄວາມວ່າ ເມື່ອມາຕຸຄາມນັ່ງ ພິກສຸນັ່ງໃກ້ຫລືນອນໃກ້ ເມື່ອພິກສຸນັ່ງ ມາຕຸຄາມນັ່ງໃກ້ຫລືນອນໃກ້ ຫລືນັ່ງທັງສອງຄົນ ຫລືນອນທັງສອງຄົນ ອຸບາສິກາຊື່ວ່າ ມີວາຈາເຊື່ອຖືໄດ້ ຄື ຍິງຜູ້ບັນລຸຜົລ ຜູ້ຕຣັສຮູ້ທັມ ຜູ້ເຂົ້າໃຈສາສນາດີ

ທີ່ຊື່ວ່າ ອຸບາສິກາ ໄດ້ແກ່ ຍິງຜູ້ເຖິງພຣະພຸທທເປັນສຣນະ ເຖິງພຣະທັມເປັນສຣນະເຖິງພຣະສົງຄ໌ເປັນສຣນະ

ຄໍາວ່າ ໄດ້ເຫັນ ຄື ໄດ້ພົບ

ອຸບາສິກາມີວາຈາເຊື່ອຖືໄດ້ ກ່າວໂທສດ້ວຍອາບັຕິຢ່າງໃດຢ່າງນຶ່ງ ບັນດາອາບັຕິ ໔ ຢ່າງ ຄື ສັງຂາທິເສສ ຫລືປາຈິຕຕີຍ໌ ພິກສຸຍອມຮັບກາຣນັ່ງ ເພິ່ງຖືກປັບອາບັຕິຢ່າງໃດຢ່າງນຶ່ງ ບັນດາອາບັຕິ ໔ ຢ່າງ ຄື ສັງຂາທິເສສ ຫລືປາຈິຕຕີຍ໌ ອີກປະກາຣນຶ່ງ ອຸບາສິກາຜູ້ມີວາຈາເຊື່ອຖືໄດ້ນັ້ນກ່າວໂທສດ້ວຍອາບັຕິໃດ ພິກສຸນັ້ນ ເພິ່ງຖືກປັບດ້ວຍອາບັຕິນັ້ນ

ບົທພາຊນີຍ໌

ປະຕິຍານຕາກຣນະ

ເຫັນກໍາລັງນັ່ງຖືກຕ້ອງກາຍ

[໔໕໕] ຖ້າອຸບາສິການັ້ນກ່າວຢ່າງນີ້ວ່າ "ຂະນ້ອຍເຫັນພຣະຄຸນເຈົ້າກຳລັງນັ່ງຖືກຕ້ອງກາຍກັບມາຕຸຄາມ" ແລະພິກສຸນັ້ນກໍຍອມຮັບການນັ່ງ ເພິ່ງປັບຕາມອາບັຕິ

ຖ້າອຸບາສິການັ້ນກ່າວຢ່າງນີ້ວ່າ "ຂະນ້ອຍເຫັນພຣະຄຸນເຈົ້າກຳລັງນັ່ງຖືກຕ້ອງກາຍກັບມາຕຸຄາມ" ຖ້າພິກສຸນັ້ນກ່າວຢ່າງນີ້ວ່າ "ອາຕມານັ່ງແມ່ນແທ້ແຕ່ບໍ່ໄດ້ຖືກຕ້ອງກາຍ" ເພິ່ງປັບອາບັຕິເພາະນັ່ງ
ຖ້າອຸບາສິການັ້ນກ່າວຢ່າງນີ້ວ່າ "ຂະນ້ອຍເຫັນພຣະຄຸນເຈົ້າກຳລັງນັ່ງຖືກຕ້ອງກາຍກັບມາຕຸຄາມ" ຖ້າພິກສຸນັ້ນກ່າວຢ່າງນີ້ວ່າ "ອາຕມາບໍ່ໄດ້ນັ່ງ ແຕ່ນອນຢູ່" ເພິ່ງປັບອາບັຕິເພາະນອນ
ຖ້າອຸບາສິການັ້ນກ່າວຢ່າງນີ້ວ່າ "ຂະນ້ອຍເຫັນພຣະຄຸນເຈົ້າກຳລັງນັ່ງຖືກຕ້ອງກາຍກັບມາຕຸຄາມ" ຖ້າພິກສຸນັ້ນກ່າວຢ່າງນີ້ວ່າ "ອາຕມາບໍ່ໄດ້ນັ່ງ ແຕ່ນອນຢູ່" ບໍ່ເພິ່ງປັບອາບັຕິ

## ເຫັນກຳລັງນອນຖືກຕ້ອງກາຍ

ຖ້າອຸບາສິການັ້ນກ່າວຢ່າງນີ້ວ່າ "ຂະນ້ອຍເຫັນພຣະຄຸນເຈົ້າກຳລັງນອນຖືກຕ້ອງກາຍກັບມາຕຸຄາມ" ແລະພິກສຸນັ້ນຍອມຮັບການນອນນັ້ນ ເພິ່ງປັບຕາມອາບັຕິ ຯລຯ "ອາຕມານອນຈິງ ແຕ່ບໍ່ໄດ້ຖືກຕ້ອງກາຍ" ເພິ່ງປັບອາບັຕິເພາະນອນ ຯລຯ "ອາຕມາບໍ່ໄດ້ນອນ ແຕ່ນັ່ງຢູ່" ເພິ່ງປັບອາບັຕິເພາະນັ່ງ ຯລຯ "ອາຕມາບໍ່ໄດ້ນອນ ແຕ່ຢືນຢູ່" ບໍ່ເພິ່ງປັບອາບັຕິ

## ໄດ້ຍິນກຳລັງນັ່ງເວົ້າກັ້ງວ

ຖ້າອຸບາສິການັ້ນກ່າວຢ່າງນີ້ວ່າ "ຂະນ້ອຍໄດ້ຍິນພຣະຄຸນເຈົ້າກຳລັງນັ່ງເວົ້າກັ້ງວ ມາຕຸຄາມດ້ວຍວາຈາຊົ່ວຫຍາບ" ແລະພິກສຸນັ້ນຍອມຮັບການນັ່ງ ເພິ່ງປັບຕາມອາບັຕິ
ຖ້າອຸບາສິການັ້ນກ່າວຢ່າງນີ້ວ່າ "ຂະນ້ອຍໄດ້ຍິນພຣະຄຸນເຈົ້າກຳລັງນັ່ງເວົ້າກັ້ງວມາຕຸຄາມດ້ວຍວາຈາຊົ່ວຫຍາບ" ຖ້າພິກສຸນັ້ນກ່າວຢ່າງນີ້ວ່າ "ອາຕມານັ່ງແມ່ນແທ້ແຕ່ບໍ່ໄດ້ເວົ້າກັ້ງວຍິງດ້ວຍວາຈາຊົ່ວຫຍາບ" ເພິ່ງປັບອາບັຕິເພາະນັ່ງ ຯລຯ "ອາຕມາບໍ່ໄດ້ນັ່ງ ແຕ່ນອນຢູ່" ເພິ່ງປັບອາບັຕິເພາະນອນ ຯລຯ "ອາຕມາບໍ່ໄດ້ນັ່ງ ແຕ່ຢືນຢູ່" ບໍ່ເພິ່ງປັບອາບັຕິ

## ໄດ້ຍິນກຳລັງນອນເວົ້າກັ້ງວ

ຖ້າອຸບາສິການັ້ນກ່າວຢ່າງນີ້ວ່າ "ຂະນ້ອຍໄດ້ຍິນພຣະຄຸນເຈົ້າກຳລັງນອນເວົ້າກັ້ງວມາຕຸຄາມດ້ວຍວາຈາຊົ່ວຫຍາບ" ແລະພິກສຸນັ້ນຍອມຮັບການນອນ ເພິ່ງປັບຕາມອາບັຕິ ຯລຯ "ອາຕມານອນແມ່ນ

ແທ້ແຕ່ບໍ່ໄດ້ເວົ້າກັງວອນມາຕຸຄາມດ້ວຍອາຈາລະຊື່ອຫຍາບ" ເພິ່ງປັບອາບັຕິເພາະນອນ ຯລຯ "ອາຕມາບໍ່ໄດ້ນອນ ແຕ່ນັ່ງຢູ່" ເພິ່ງປັບອາບັຕິເພາະນັ່ງ ຯລຯ "ອາຕມາບໍ່ໄດ້ນອນ ແຕ່ຢືນຢູ່" ບໍ່ເພິ່ງປັບອາບັຕິ

## ເຫັນນັ່ງໃນທີ່ລັບ

[໔໕໕] ຖ້າອຸບາສິການັ້ນກ່າວຢ່າງນີ້ວ່າ "ຂະນ້ອຍເຫັນພຣະຄຸນເຈົ້ານັ່ງໃນທີ່ລັບກັບມາຕຸຄາມສອງຕໍ່ສອງ" ແລະພິກສຸນັ້ນກໍຍອມຮັບການນັ່ງ ເພິ່ງປັບອາບັຕິເພາະນັ່ງ ຯລຯ "ອາຕມາບໍ່ໄດ້ນັ່ງ ແຕ່ນອນຢູ່" ເພິ່ງປັບອາບັຕິເພາະນອນ ຯລຯ "ອາຕມາບໍ່ໄດ້ນັ່ງ ແຕ່ຢືນຢູ່" ບໍ່ເພິ່ງປັບອາບັຕິ

## ເຫັນນອນໃນທີ່ລັບ

ຖ້າອຸບາສິການັ້ນກ່າວຢ່າງນີ້ວ່າ "ຂະນ້ອຍເຫັນພຣະຄຸນເຈົ້ານອນໃນທີ່ລັບກັບມາຕຸຄາມສອງຕໍ່ສອງ" ແລະພິກສຸນັ້ນຍອມຮັບການນອນ ເພິ່ງປັບອາບັຕິເພາະນອນ ຯລຯ "ອາຕມາບໍ່ໄດ້ນອນ ແຕ່ນັ່ງຢູ່" ເພິ່ງປັບອາບັຕິເພາະນັ່ງ ຯລຯ "ອາຕມາບໍ່ໄດ້ນອນ ແຕ່ຢືນຢູ່" ບໍ່ເພິ່ງປັບອາບັຕິ

ຄຳວ່າ ແມ່ນນີ້ ພຣະຜູ້ມີພຣະພາຄຕຣັສຫຽບສິກຂາບົທກ່ອນ

ຄຳວ່າ ອນິຍຕ ຄື ບໍ່ແນ່ວ່າຈະເປັນສັງຂາທິເສສ ຫລືເປັນປາຈິຕຕີຍ໌

[໔໕໗] ພິກສຸຍອມຮັບການໄປ ຍອມຮັບການນັ່ງ ຍອມຮັບອາບັຕິ ເພິ່ງປັບຕາມອາບັຕິ

ພິກສຸຍອມຮັບການໄປ ບໍ່ຍອມຮັບການນັ່ງ ຍອມຮັບອາບັຕິ ເພິ່ງປັບຕາມອາບັຕິ

ພິກສຸຍອມຮັບການໄປ ຍອມຮັບການນັ່ງ ບໍ່ຍອມຮັບອາບັຕິ ເພິ່ງປັບອາບັຕິເພາະການນັ່ງ

ພິກສຸຍອມຮັບການໄປ ບໍ່ຍອມຮັບການນັ່ງ ບໍ່ຍອມຮັບອາບັຕິ ບໍ່ເພິ່ງປັບອາບັຕິ

ພິກສຸບໍ່ຍອມຮັບການໄປ ຍອມຮັບການນັ່ງ ຍອມຮັບອາບັຕິ ເພິ່ງປັບຕາມອາບັຕິ

ພິກສຸບໍ່ຍອມຮັບການໄປ ບໍ່ຍອມຮັບການນັ່ງ ຍອມຮັບອາບັຕິ ເພິ່ງປັບຕາມອາບັຕິ

ພິກສຸບໍ່ຍອມຮັບການໄປ ຍອມຮັບການນັ່ງ ບໍ່ຍອມຮັບອາບັຕິ ເພິ່ງປັບອາບັຕິເພາະການນັ່ງ

ພິກສຸບໍ່ຍອມຮັບການໄປ ບໍ່ຍອມຮັບການນັ່ງ ບໍ່ຍອມຮັບອາບັຕິ ບໍ່ເພິ່ງປັບອາບັຕິ

## ທຸຕິຍອນິຍຕສິກຂາບົທ ຈົບ

## ບົທສຣຸປ

[໔໕໗] ທ່ານທັງຫລາຍ ທັມຄືນິຍຕ ໔ ສິກຂາບົທ ຂ້າພະເຈົ້າຍົກຂຶ້ນສະແດງແລ້ວ ຂ້າພະເຈົ້າຂໍຖາມທ່ານທັງຫລາຍໃນທັມຄືອນິຍຕ ໔ ສິກຂາບົທນັ້ນວ່າ "ທ່ານທັງຫລາຍບໍຣິສຸດທ໌ແລ້ວຫລື" ຂ້າພະເຈົ້າຂໍຖາມເປັນຄັ້ງທີ ໔ ວ່າ "ທ່ານທັງຫລາຍບໍຣິສຸດທ໌ແລ້ວຫລື" ຂ້າພະເຈົ້າຂໍຖາມເປັນຄັ້ງທີ ໓ ວ່າ "ທ່ານທັງຫລາຍບໍຣິສຸດທ໌ແລ້ວຫລື" ທ່ານທັງຫລາຍບໍຣິສຸດທ໌ແລ້ວໃນທັມຄືອນິຍຕ ໔ ສິກຂາບົທນີ້ ເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືຄວາມນິ່ງນັ້ນເປັນມຕິຢ່າງນີ້

ຮວມສິກຂາບົທທີ່ມີໃນອນິຍຕກັນທ໌

ອນິຍຕກັນທ໌ມີ ໔ ສິກຂາບົທ ຄື

໑. ປຖມອນິຍຕສິກຂາບົທ ວ່າດ້ວຍການນັ່ງໃນທີ່ລັບຕາກັບຍິງສອງຕໍ່ສອງ

໔. ທຸດິຍອນິຍຕສິກຂາບົທ ວ່າດ້ວຍການນັ່ງໃນທີ່ລັບຫູກັບຍິງສອງຕໍ່ສອງ

ພຣະພຸທທເຈົ້າຜູ້ປະເສີດແລະຜູ້ມີຄວາມຄົງທີ່ ຊົງບັນຍັຕໄວ້ດີແລ້ວ

ອນິຍຕກັນທ໌ ຈົບ

ພຣະໄຕຣປີດົກເຫລັ້ມທີ ໐໑ ວິນັຍປີດົກທີ ໐໑ ມຫາວິພັງຄ໌ ພາຄ ໑ ຈົບ